ຄູ່ມືເຫຼັ້ມທີ 1

ການສ້າງສະພາບແວດລ້ອມເພື່ອເປັນການສຶກສາ ຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້



ກະຊວງສຶກສາທິການ
ສູນການສຶກສາຮຽນຮ່ວມ
ສະໜັບສະໜູນໂດຍ ອົງການອຸຍແນດສະໂກ
ນະຄອນຫຼວງວຽງຈັນ, ສປປ ລາວ
2011

ISBN 92-9223-032-8 (4 booklets)

ຄຳນຳ

ຊຸດຄູ່ມືແນະນຳການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດຕໍ່ ການຮຽນຮູ້ ໄດ້ສ້າງ ຂຶ້ນໂດຍອົງການອຸຍແນສໂກປະຈຳພາກພື້ນອາຊີ-ປາຊີຟິກ ພ້ອມທັງພິມແຈກ ຢາຍຢ່າງກ້ວາງຂວາງ ໃນທົ່ວພາກພື້ນ. ຄູ່ມືດັ່ງກ່າວມີທັງໝົດ 4 ເຫຼັ້ມຄື: ຄູ່ມືແນະນຳການສ້າງສະ ພາບແວດລ້ອມ, ຄູ່ມືແນະນຳການຈັດການສອນຫ້ອງຮຽນຮ່ວມ, ຄູ່ມືແນະນຳການສົ່ງເສີມສຸຂະ ພາບ, ຄູ່ມືແນະນຳການປະຕິບັດວິໄນ/ ການສຶກສາອົບຮົມແບບສ້າງສັນໃນຫ້ອງຮຽນຮ່ວມທີ່ເປັນການຮຽນ ຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ສຳລັບຄູ່ມືແນະນຳເຫຼັ້ມນີ້ເປັນຄູ່ມືແນະນຳເຫຼັ້ມທີ 1: ເນື້ອໃນເວົ້າເຖິງ ການສ້າງສະພາບແວດ ລ້ອມເພື່ອເປັນການສຶກສາຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຈຸດປະສົງຫຼັກຂອງຄູ່ມື ແນະນຳເຫຼັ້ມນີ້ ແມ່ນເພື່ອເຂົ້າໃຈຄວາມໝາຍ, ຄວາມສຳຄັນ, ການສຶກສາສະພາບບັນຫາ, ວິທີການ ສ້າງ ແລະ ການຮັກ ສາສະພາບແວດລ້ອມທີ່ ເປັນການຮຽນຮ່ວມ. ເພື່ອເສີມສ້າງຄວາມສາມາດ ສຳລັບຜູ້ຊົມໃຊ້ກ່ຽວຂ້ອງກັບ ວິທີການຮ່ວມເຮັດວຽກກັບຄອບຄົວ ແລະ ຊຸມຊົນ, ການພົວ ພັນ ແລະ ການໂຄສະນາຊົນຂວາຍຂອງຄູຕໍ່ຄອບຄົວ ແລະ ຊຸມຊົນ, ການວາງແຜນ ແລະ ວິທີວິໄຈຂໍ້ມູນ ຂັ້ນພື້ນຖານ ເພື່ອນຳເອົາເດັກທຸກຄົນເຂົ້າໂຮງຮຽນ. ນອກຈາກນີ້, ຍັງສະໜອງແນວທາງ, ວິທີການ ສ້າງສະພາບແວດລ້ອມ, ການຈັດການສອນຫ້ອງຮຽນ ຮ່ວມ, ການສົ່ງເສີມສຸຂະພາບ ແລະ ການ ປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການ ຮຽນຮູ້ຕາມຫຼັກວິຊາການ ເພື່ອສ້າງໂຮງຮຽນ ແລະ ຫ້ອງຮຽນໃຫ້ກາຍເປັນການສຶກສາຮຽນຮ່ວມ ແລະ ເປັນມິດຫຼາຍຂຶ້ນ, ຊຶ່ງເປັນປະໂຫຍດສູງສຳລັບຜູ້ສ້າງນະໂຍບາຍ, ຜູ້ຈັດຕັ້ງ ປະຕິບັດ ແລະ ຊຸມຊົນ.

ເພື່ອສຳເລັດເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫະສະວັດ ເພື່ອການພັດ ທະນາ ໃນປີ 2015. ອົງການອຸຍແນສໂກ ໄດ້ແນະນຳໃຫ້ແຕ່ລະປະເທດສະມາຊິກດຳເນີນການແປ ເປັນພາສາຂອງຕົນເອງ ແລະ ດັດປັບ ໃຫ້ແທດເໝາະກັບສະພາບຕົວ ຈິງຂອງ ແຕ່ລະປະ ເທດ. ສຳລັບ ສປປ ລາວ, ອະດີດກົມສາມັນສຶກສາໄດ້ຮັບການສະ ໜັບສະໜູນ ໃນການແປຈາກສະບັບ ຕົ້ນທີ່ເປັນພາສາອັງກິດມາເປັນສະບັບພາສາລາວ. ຈາກນັ້ນ, ໃນປີ 2010 ໂດຍການສືບຕໍ່ສະໜັບ ສະໜູນຈາກອົງການ UNESCO, ສູນການສຶກສາຮຽນຮ່ວມໄດ້ຮ່ວມກັບກົມສ້າງຄູ, ກົມປະຖົມ ແລະ ອະນຸບານ ແລະ ສະຖາບັນສ້າງຄູ 8 ແຫ່ງ ຈັດກອງປະຊຸມວິຊາການຮຽບຮຽງ, ປັບປຸງ ແລະ ຮິບໂຮມ ອີກຄັ້ງໜຶ່ງ. ການປັບປຸງ ແລະ ຮິບໂຮມຄັ້ງນີ້ບໍ່ໄດ້ປ່ຽນແປງເນື້ອໃນແຕ່ປະການໃດ ພຽງແຕ່ນຳໃຊ້ຄຳ ສັບ ແລະ ສຳນວນເປັນ ພາສາລາວ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ຕົວຢ່າງຈຳນວນ ໜຶ່ງຖືກຄັດອອກ ເພື່ອໃຫ້ມີລັກສະນະກະທັດລັດແກ່ຜູ້ຊົມໃຊ້.

ສູນການສຶກສາຮຽນຮ່ວມສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງທີມງານວິຊາການຈາກກະຊວງ ສຶກສາທິການ ແລະ ສະຖາບັນສ້າງຄູທັງ 8 ແຫ່ງ ທີ່ໄດ້ໃຫ້ການຮ່ວມມືໃນການຮຽບຮຽງຄູ່ມືດັ່ງກ່າວ. ພິເສດຂໍຂອບໃຈມາຍັງ ອົງການອຸຍແນສໂກ ທີ່ໃຫ້ການສະໜັບສະໜູນດ້ານງົບປະມານນັບທັງການຮຽບຮຽງ ແລະ ຄ່າພິມແຈກຢາຍອີກດ້ວຍ. ເປັນທີ່ແນ່ນອນວ່າການປັບປຸງ, ຣິບໂຮມຄັ້ງນີ້ຈະບໍ່ປາສະຈາກໄດ້ຂໍ້ຂາດຕົກບົກຜ່ອງ. ສູນການສຶກສາຮຽນຮ່ວມມີຄວາມຍິນດີຮັບເອົາຄຳຕຳນິຕິຊົມທຸກປະການຈາກຜູ້ອ່ານ ແລະ ຜູ້ຊົມໃຊ້ ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນໃນອະນາຄົດ.

ຜູ້ອຳນວຍການສູນການສຶກສາຮຽນຮ່ວມ

ສາລະບານ

ໜ້າ

ພາກສະເໜີ 1
ພາກທີ I: ການປ່ຽນແປງສະພາບແວດລ້ອມໃຫ້ກາຍເປັນການຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້. (ສຮພຮ) 2
ບົດທີ 1: ຄວາມໝາຍ ແລະ ຄວາມສຳຄັນໃນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. (ສຮພຮ) 2
I. ຄວາມໝາຍ ແລະ ຄວາມສຳຄັນຂອງການສຶກສາຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ .2
1. ການສຶກສາຮຽນຮ່ວມ. 2
2. ການເປັນເພື່ອນມິດໃນການຮຽນຮູ້ 3
3. ກໍລະນີສຶກສາກ່ຽວກັບຫ້ອງຮຽນຮ່ວມແລະ ເປັນເພື່ອນມິດໃນການຮຽນຮູ້. 3
II. ຄຸນລັກສະນະ ແລະ ອົງປະກອບຂອງຫ້ອງຮຽນຮ່ວມ ແລະ ເປັນມິດໃນການຮຽນຮູ້. 4
1 ຄຸນລັກສະນະ 4
2. ອົງປະກອບບາງຢ່າງທີ່ສະແດງອອກເຖິງການຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້ 6
ກ. ການພົວພັນຄອບຄົວແລະຊຸມຊົນ. 6
ຂ. ບົດບາດຍິງ-ຊາຍ: 7
ຄ. ຄວາມປອດໄພ, ການປົກປ້ອງ ແລະສິ່ງເສີມສຸຂະພາບ. 7
III. ຄຸນປະໂຫຍດທີ່ຈະໄດ້ຮັບຈາກສະພາບແວດລ້ອມຂອງການຮຽນຮ່ວມ ແລະ ເປັນເພື່ອນມິດ 8
1. ຜົນປະໂຫຍດທີ່ເດັກຈະໄດ້ຮັບ. 8
2. ຜົນປະໂຫຍດທີ່ຄູຈະໄດ້ຮັບ. 9
3. ປະໂຫຍດທີ່ພໍ່ແມ່/ຜູ້ປົກຄອງຈະໄດ້ຮັບ. 10
4. ຜົນປະໂຫຍດທີ່ຊຸມຊົນຈະໄດ້ຮັບ 10
ບົດທີ 2 : ການສຶກສາສະພາບບັນຫາ, ວິທີສ້າງ ແລະ ການຮັກສາສະພາບແວດລ້ອມ ທີ່ເປັນ ການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ໃຫ້ຍືນຍົງ 12
I. ການສຶກສາສະພາບບັນຫາ ສະພາບແວດລ້ອມການຮຽນຮ່ວມ ແລະ ເປັນເພື່ອນມິດ 12
1. ນະໂຍບາຍຂອງໂຮງຮຽນ ແລະ ການສະໜັບສະໜູນຈາກຜູ້ບໍລິຫານໂຮງຮຽນຂອງທ່ານ. 12
2. ສະພາບແວດລ້ອມໂຮງຮຽນ 13
3. ທັກສະ, ຄວາມຮູ້ ແລະ ທັດສະນະຄະຕິຂອງຄູ 14
4 . ການພັດທະນາຄູ 15
5. ເດັກນັກຮຽນ 16

6. ເນື້ອໃນວິຊາການ ແລະ ການປະເມີນຜົນ....16
7. ຂົງເຂດວິຊາຮຽນພິເສດ / ກິດຈະກຳຫຼັກສູດເພີ່ມເຕີມ....17
8. ຊຸມຊົນ....17
II. ວິທີສ້າງ ແລະ ຮັກສາການປ່ຽນແປງໃຫ້ຍືນຍົງ....18
1. ການນຳພາ.....18
2. ການເຝິກອົບຮົມ ແລະໂອກາດການໄດ້ຮຽນຮູ້.....18
3. ການປັບປຸງການສອນ ແລະການຮຽນໃນຫ້ອງຮຽນ....19
4. ການຕິດຕໍ່ສື່ສານລະຫວ່າງໂຮງຮຽນ ແລະຊຸມຊົນ....19
5. ຊັບພະຍາກອນຕ່າງໆ....19
6. ການວາງແຜນ....20
7. ການຮຽນແບບຮ່ວມມື ແລະ ເປັນຄະນະ....20
8. ພາລະກິດ, ວິໄສທັດ ແລະ ວັດທະນະທຳຂອງໂຮງຮຽນ....20
9. ການຕິດຕໍ່ສື່ສານທີ່ພວມດຳເນີນຢູ່....20
ບົດທີ 3 : ຂັ້ນຕອນເພື່ອຈະກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມເປັນການ ຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້....21
I. ວິທີວາງແຜນເພື່ອຈະກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມ ແບບຮຽນຮ່ວມ ແລະ....21
ຂັ້ນຕອນທີ 1: ສ້າງຕັ້ງຄະນະຮັບຜິດຊອບສ້າງສະພາບແວດລ້ອມການຮຽນຮ່ວມ
ແລະ ເປັນເພື່ອນ ມິດໃນການຮຽນຮູ້.....22
ຂັ້ນຕອນທີ 2: ລະບຸຄວາມຕ້ອງການ.....22
ຂັ້ນຕອນທີ 3 : ສ້າງວິໄສທັດ....24
ຂັ້ນຕອນທີ 4: ການສ້າງແຜນພັດທະນາ....24
ຂັ້ນຕອນທີ 5: ດຳເນີນປະຕິບັດຕາມແຜນທີ່ວາງໄວ້....25
ຂັ້ນຕອນທີ 6: ປະເມີນຜົນຈາກການປະຕິບັດ....26
II. ວິທີຕິດຕາມຄວາມກ້າວໜ້າ....26
1. ບັນທຶກປະຈຳວັນ.....27
2 ເວົ້າລົມກັບຜູ້ອື່ນໆ....28
3 ປະເມີນຄວາມຮູ້ ແລະ ທັກສະໂດຍຜ່ານການຂຽນບົດ.....28
4 ການສັງເກດການ.....28
5 ເອກະສານຕ່າງໆ....29
ພາກທີ II: ວິທີການເຮັດວຽກຮ່ວມກັບຄອບຄົວແລະຊຸມຊົນ....30

ບົດທີ 4: ຄວາມໝາຍ ແລະ ພາລະບົດບາດຂອງຊຸມຊົນ.....30
I. ຄວາມໝາຍ ແລະ ຄວາມສຳຄັນຂອງຊຸມຊົນ.....30
1 ຄວາມໝາຍ.....30
2. ຄວາມສຳຄັນ.....30
II.ພາລະບົດບາດແລະຄວາມຮັບຜິດຊອບຂອງຄູໃນການເຮັດວຽກຮ່ວມກັບຜູ້ປົກຄອງ ແລະຊຸມຊົນ32
1 ພາລະບົດບາດຂອງຄູ.....32
2. ພາລະບົດບາດຂອງຜູ້ປົກຄອງ ແລະ ຊຸມຊົນ ຫຼື ຄະນະພັດທະນາການສຶກສາຂັ້ນບ້ານ.....33
ບົດທີ 5: ຂໍ້ມູນຂ່າວສານ ແລະ ການໂຄສະນາຊົນຂວາຍຂອງຄູຕໍ່ຄອບຄົວແລະຊຸມຊົນ.....36
1. ວິທີຕິດຕໍ່ພົວພັນ.....36
ແຜນພູມ 1. ແຜນພູມລະຫັດສີຂອງເນື້ອໃນ ແລະ ກິດຈະກຳສຳລັບເດັກຫ້ອງ ປ.3.....39
ແຜນພູມ 2. ແຜນພູມສາຍຮຸ້ງຂອງຄວາມກ້າວໜ້າຂອງນັກຮຽນ.....40
2 . ການແຈ້ງຂໍ້ມູນ ສຮພຮ ໃຫ້ແກ່ຊຸມຊົນຮັບຊາບ.....42
2.1 ຂໍ້ມູນຂ່າວສານທີ່ເປັນສິ່ງພິມ.....42
2.2 ການປະກາດຂ່າວທາງໂທລະໂຄ່ງ, ວິທະຍຸ ແລະໂທລະພາບແກ່ປະຊາຊົນ.....42
2.3 ການປະຊຸມຊຸມຊົນ ຫຼື ປະຊຸມກຸ່ມ.....42
2.4 ດຶງດູດເອົາການບໍລິການຕ່າງໆຂອງສັງຄົມເຂົ້າຮ່ວມ.....43
2.5 ເຊື່ອມໂຍງ (ສ້າງເຄືອຂ່າຍ) ກັບໂຮງຮຽນອື່ນໆ.....43
3 ຍຸດທະສາດຂອງການໂຄສະນາຊົນຂວາຍ.....43
3.1 ຊຸກຍູ້ສິ່ງເສີມໃຫ້ຜູ້ປົກຄອງບອກຄົນອື່ນຕໍ່ກ່ຽວກັບໂຮງຮຽນທີ່ມີ ສຮພຮ.....43
3.2 ຊັກຈູງພໍ່ແມ່ຜູ້ປົກຄອງເຂົ້າມີສ່ວນຮ່ວມໃນຫ້ອງຮຽນເພື່ອຊ່ວຍເດັກ ທີ່ເຄີຍຖືກປະປ່ອຍ.....44
3.3 ນຳເອົາຜູ້ປົກຄອງເຂົ້າມີສ່ວນຮ່ວມໃນກິດຈະກຳຄົ້ນຫາເດັກທີ່ຖືກປະປ່ອຍບໍ່ເຄີຍເຂົ້າໂຮງຮຽນ 44
3.4 ເຊື່ອມໂຍງຊຸມຊົນບໍລິຫານຄຸ້ມຄອງໂຮງຮຽນກັບການສ້າງສະພາບແວດລ້ອມທີ່ເປັນ
ການຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້.....45
3.5 ລົງຢ້ຽມຢາມຄອບຄົວ.....45
ບົດທີ 6: ຊຸມຊົນ ແລະ ຫຼັກສູດ.....46
I. ຊຸມຊົນກັບຫ້ອງຮຽນ ແລະ ຫ້ອງຮຽນກັບຊຸມຊົນ.....46
1. ຊຸມຊົນກັບຫ້ອງຮຽນ.....46
2 ຫ້ອງຮຽນກັບຊຸມຊົນ.....48
ພາກທີ III : ການນຳເອົາເດັກທຸກຄົນເຂົ້າໂຮງຮຽນ ແລະ ການຮຽນຮູ້.....51
ບົດທີ 7 : ປະເພດເດັກທີ່ບໍ່ໄດ້ເຂົ້າຮຽນ.....51

1. ບາງປະເພດຂອງເດັກທີ່ມີບັນຫາບໍ່ໄດ້ເຂົ້າຮຽນ. 51
2. ການຊອກຮູ້ອຸປະສັກທີ່ກີດຂວາງການຮຽນຮ່ວມ : 51
2.1 ບາງເຫດຜົນຂອງເດັກທີ່ບໍ່ໄດ້ມາໂຮງຮຽນ 52
2.2 ສະພາບແວດລ້ອມຄອບຄົວ 54
2.3. ສະພາບແວດລ້ອມຂອງຊຸມຊົນ. 55
2.4. ສະພາບແວດລ້ອມໃນໂຮງຮຽນ 56
ບົດທີ 8: ການຊອກຫາເດັກ ແລະ ສາເຫດທີ່ເດັກບໍ່ໄດ້ເຂົ້າໂຮງຮຽນ 61
I. ຄວາມໝາຍ ແລະ ຄວາມສຳຄັນຂອງແຜນທີ່ການສຶກສາບ້ານ 61
1. ວິທີເກັບກຳຂໍ້ມູນເພື່ອສ້າງແຜນທີ່ການສຶກສາບ້ານ 61
2. ຂັ້ນຕອນການແຕ້ມແຜນທີ່ : 66
II. ການຊອກຫາເດັກແລະເຫດຜົນທີ່ເດັກບໍ່ໄດ້ເຂົ້າໂຮງຮຽນ 71
ບົດທີ 9: ການປະຕິບັດການເພື່ອນຳເອົາເດັກທຸກຄົນເຂົ້າໂຮງຮຽນ 76
1. ການວາງແຜນປະຕິບັດ 76
2. ແນວຄວາມຄິດເພື່ອປະຕິບັດການ 78

ພາກສະເໜີ

ແນະນຳ (Tools guide)

ປຶ້ມຄູ່ມືເຫຼັ້ມນີ້ຈະອະທິບາຍກ່ຽວກັບສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເພື່ອນມິດ ໃນການຮຽນຮູ້; ຄູ-ອາຈານ, ເດັກນັກຮຽນ, ຜູ້ປົກຄອງ ແລະຊຸມຊົນຈະໄດ້ຮັບປະໂຫຍດຫຍັງແດ່ ຈາກ ການສ້າງສະພາບແວດລ້ອມດັ່ງກ່າວ. ປຶ້ມເຫຼັ້ມນີ້ຍັງຈະຊ່ວຍກຳນົດແນວທາງ ເຖິງວ່າ ໂຮງຮຽນຂອງ ທ່ານ ອາດຈະມີ ສະພາບແວດລ້ອມທີ່ເປັນເພື່ອນມິດ ແລະຮຽນຮ່ວມຢູ່ແລ້ວກໍຕາມ ລວມທັງກຳນົດຂົງ ເຂດທີ່ອາດຈຳເປັນ ຕ້ອງພັດທະນາໃຫ້ດີຂຶ້ນກ່ວາເດີມອີກດ້ວຍ. ຄູ່ມືນີ້ຈະ ໃຫ້ແນວຄວາມຄິດ ກ່ຽວກັບວິທີວາງແຜນເພື່ອປັບປຸງສິ່ງຕ່າງໆ ເຊັ່ນ : ວິທີຕິດຕາມ ແລະ ປະເມີນຜົນຄວາມກ້າວໜ້າຂອງ ທ່ານ.

ສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດຕໍ່ການຮຽນຮູ້ ແມ່ນໃຫ້ການສຶກສາແກ່ ເດັກທຸກຄົນ ໂດຍບໍ່ຄຳນຶງເຖິງຄຸນລັກສະນະທາງເພດ, ຮ່າງກາຍ, ມັນສະໝອງ, ສັງຄົມ, ອາລົມ, ພາສາ ຫຼື ຄຸນ ລັກສະນະອື່ນໆ. ພວກເຂົາອາດເປັນເດັກພິການ ຫຼືເດັກທີ່ມີພອນສະຫວັນ, ເປັນເດັກຂ້າງຖະໜົນ, ເດັກທີ່ຈຳເປັນຕ້ອງເຮັດວຽກຫຼາຍ, ເປັນເດັກທີ່ຢູ່ເຂດຫ່າງໄກສອກຫຼີກ, ເປັນເດັກຊົນເຜົ່າສ່ວນໜ້ອຍທີ່ມີ ພາສາ ແລະ ວັດ ທະນະທຳແຕກຕ່າງກັນ, ເປັນເດັກທີ່ໄດ້ຮັບຜົນກະທົບຈາກເອັດໄອວີ/ເອດ ຫຼື ເປັນເດັກທີ່ ມາຈາກພື້ນທີ່ໆດ້ອຍ ໂອກາດທາງການສຶກສາ.

ພາກທີ I: ການປ່ຽນແປງສະພາບແວດລ້ອມໃຫ້ກາຍເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. (ສຮພຮ)

ບົດທີ 1: ຄວາມໝາຍ ແລະ ຄວາມສຳຄັນໃນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້(ສຮພຮ)

I. ຄວາມໝາຍ ແລະ ຄວາມສຳຄັນຂອງການສຶກສາຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

1. ການສຶກສາຮຽນຮ່ວມ.

ການສຶກສາຮຽນຮ່ວມແມ່ນການສະໜອງ ການສຶກສາທີ່ມີ ຄຸນນະພາບ ແລະ ສະເໝີພາບສຳລັບເດັກທຸກຄົນ ໃນທຸກຊັ້ນ ທຸກສາຍ ໂດຍບໍ່ຈຳແນກ ຊົນເຜົ່າ, ພາສາ, ສາສະໜາ, ເພດ, ໄວ, ພິການ ແລະ ຖານະ ທາງດ້ານເສດຖະກິດ-ສັງຄົມ; ໄດ້ເຂົ້າຮຽນຢ່າງເຕັມສ່ວນ ແລະ ເປັນປົກກະຕິມີຄວາມກ້າວໜ້າ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ການຮຽນຮ່ວມເປັນເລື່ອງກ່ຽວກັບການປ່ຽນແປງໃນທາງປະຕິບັດທີ່ແທ້ຈິງ ເຊິ່ງພວກເຮົາສາມາດເຮັດໄດ້ ເພື່ອໃຫ້ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ກໍຄືເດັກທຸກຄົນ ສາມາດຮຽນໄດ້ ພ້ອມ ທັງ ປະສົບຜົນສຳເລັດໃນຫ້ອງຮຽນ ແລະ ໂຮງຮຽນ. ການປ່ຽນແປງນີ້ມັນມີຄວາມສຳຄັນ ເຊັ່ນ: ບໍ່ພຽງແຕ່ຈະ ໃຫ້ປະໂຫຍດແກ່ເດັກທີ່ມີຄວາມຕ້ອງການພິເສດເທົ່ານັ້ນ ແຕ່ຈະເປັນປະໂຫຍດ ສຳລັບ ເດັກທຸກຄົນ, ພໍ່ແມ່ຜູ້ ປົກຄອງ, ຄູ, ຜູ້ບໍລິຫານ ແລະ ທຸກໆຄົນໃນຊຸມຊົນ ທີ່ເຮັດວຽກຮ່ວມກັບໂຮງຮຽນ.

ເດັກທຸກຄົນມີສິດໃນການຮຽນຮູ້ ຕາມທີ່ໄດ້ຕົກລົງກັນໃນສົນທິສັນຍາວ່າດ້ວຍສິດທິເດັກ ເຊິ່ງ ລັດຖະບານເກືອບທັງໝົດໃນໂລກນີ້ທີ່ໄດ້ເຊັນຮັບຮອງ. ຍິ່ງໄປກວ່ານັ້ນ, ເດັກທຸກຄົນສາມາດຮຽນຮູ້, ໂດຍບໍ່ ຄຳນຶງເຖິງສະພາວະເງື່ອນໄຂທາງດ້ານຮ່າງກາຍ, ມັນສະໜອງ, ສັງຄົມ, ອາລົມຄວາມຮູ້ສຶກ, ພາສາ ຫຼື ເງື່ອນໄຂ ອື່ນໆ. ໃນນີ້ ປະກອບດ້ວຍເດັກພິການ ແລະເດັກພອນສະຫວັນ; ເດັກຂ້າງຖະໜົນ ແລະ ເດັກເຮັດວຽກຫຼາຍ; ເດັກທີ່ຢູ່ເຂດຫ່າງໄກສອກຫຼີກ, ເດັກຂ້າງຖະໜົນ; ເດັກທີ່ມາຈາກແຕ່ລະ ເຜົ່າມີວັດທະນະທຳ ແລະ ຮີດຄອງປະເພນີທີ່ແຕກຕ່າງກັນ; ເດັກທີ່ມີຜົນກະທົບຈາກເອັດໄອວີ/ເອດ ແລະ ເດັກທີ່ມາຈາກຂົງເຂດ ຫຼື ກຸ່ມດ້ອຍໂອກາດອື່ນໆ ເຊິ່ງເດັກເຫຼົ່ານີ້ລ້ວນແຕ່ເປັນອົງປະກອບທີ່ ສຳຄັນ ສຳລັບ ການສ້າງສະພາບແວດລ້ອມຂອງການຮຽນຮ່ວມ ແລະ ເປັນເພື່ອນມິດເພື່ອພັດທະນາ ເດັກທຸກຄົນດັ່ງນັ້ນ, ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້ຈຶ່ງ

ມີຄວາມສຳຄັນບໍ່ພຽງແຕ່ ເພື່ອພັດທະນາເດັກຂອງເຮົາທຸກຄົນ ແຕ່ຍັງ ເພື່ອພັດທະນາວິຊາຊີບຂອງ ພວກເຮົາໃນຖານະທີ່ເປັນຄູອີກດ້ວຍ.

2. ການເປັນເພື່ອນມິດໃນການຮຽນຮູ້

ສະພາບແວດລ້ອມທີ່ເປັນເພື່ອນມິດໃນການຮຽນຮູ້ ແມ່ນສະພາບແວດລ້ອມທີ່ເປັນເພື່ອນເດັກ ແລະ "ເພື່ອນຄູ" ນຳດ້ວຍ. ເຊິ່ງມັນເລັ່ງໃສ່ການຮຽນຮູ້ຂອງເດັກ ແລະ ຄູພ້ອມກັນເຮັດໃຫ້ເປັນເໝືອນ ຊຸມຊົນ. ໂດຍຖືເອົາເດັກເປັນເປັນສູນກາງແຫ່ງການຮຽນຮູ້ ແລະ ຊຸກຍູ້ສິ່ງເສີມການມີສ່ວນຮ່ວມຢ່າງ ຕັ້ງໜ້າ, ອີກປະການໜຶ່ງ ມັນຍັງສະໜອງຄວາມຕ້ອງການ ແລະ ຄວາມສົນໃຈຂອງພວກເຮົາ ໃນຖາ ນະທີ່ເປັນຄູ ເພື່ອເຮັດໃຫ້ ຄວາມຕ້ອງການ ແລະຄວາມສາມາດທີ່ຈະໃຫ້ການສຶກສາແກ່ເດັກ ດີທີ່ສຸດ.

ໜ້າຍໂຮງຮຽນກຳລັງເຮັດໃຫ້ໂຮງຮຽນກາຍເປັນໂຮງຮຽນທີ່ເປັນເພື່ອນເດັກ, ເຊິ່ງເປັນບ່ອນທີ່ ເດັກມີ ສິດທີ່ຈະຮຽນຮູ້ເຕັມຄວາມສາມາດຂອງພວກເຂົາພາຍໃນສະພາບແວດລ້ອມທີ່ປອດໄພ ແລະ ມີຄວາມຍິນດີ ຕ້ອນຮັບ. ໂດຍມີຈຸດປະສົງເພື່ອຈະປັບປຸງການມີສ່ວນຮ່ວມ ແລະ ການຮຽນຮູ້ຂອງ ເດັກແຕ່ລະຄົນ ໃນ ໂຮງຮຽນໜ້າຍກວ່າ. ແທນທີ່ຈະສຸມໃສ່ແຕ່ເລື່ອງວິຊາຮຽນ ແລະ ການສອບເສັງ. ການເປັນໂຮງຮຽນ "ເພື່ອນເດັກ" ມີຄວາມສຳຄັນທີ່ສຸດ ສຳລັບເດັກມາໂຮງຮຽນເພື່ອຮຽນຮູ້, ແຕ່ໃນຖາ ນະທີ່ເປັນຄູ, ພວກເຮົາ ຕ້ອງຮຽນຮູ້ສິ່ງໃໝ່ໆ ກ່ຽວກັບໂລກເພື່ອຈະສອນເດັກ, ພວກເຮົາຮຽນຮູ້ວິທີຈະ ສອນເດັກຢ່າງມີປະສິດທິພາບ ແລະ ຢ່າງສະໜຸກສະໜານໜ້າຍຂຶ້ນ ເພື່ອຈະໃຫ້ນັກຮຽນທຸກຄົນຮຽນ ອ່ານ ຫຼື ຄິດໄລ່ເລກເປັນ ແລະ ພວກ ເຮົາຍັງຮຽນຮູ້ສິ່ງໃໝ່ຈາກນັກຮຽນອີກດ້ວຍ.

3. ກໍລະນີສຶກສາກ່ຽວກັບຫ້ອງຮຽນຮ່ວມແລະ ເປັນເພື່ອນມິດໃນການຮຽນຮູ້.

ຫ້ອງຮຽນຫ້ອງໃດຢູ່ຂ້າງລຸ່ມນີ້ ທີ່ທ່ານຄິດວ່າເປັນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້?

<u>ຫ້ອງຮຽນ ກ</u> :

ມີນັກຮຽນຊັ້ນ ປ.3 ຈຳນວນ 40 ຄົນ ນັ່ງໃນຫ້ອງ, ພ້ອມທັງເປີດປຶ້ມບົດເຝິກຫັດໄວ້ ແລະ ຈັບປາກ ຂຽນໃນມື . ຄູກຳລັງກ່າຍບົດເລື່ອງຈາກປຶ້ມແບບຮຽນໃສ່ກະດານ ໂດຍບໍ່ໃຫ້ຜິດຈາກບົດ ທີ່ຂຽນຢູ່ໃນ ປຶ້ມ. ພວກນັກຮຽນຊາຍ ທີ່ນັ່ງຢູ່ດ້ານຂວາມືຂອງຫ້ອງຮຽນກ່າຍສິ່ງທີ່ຄູຂຽນໃສ່ກະດານລົງໃນປຶ້ມບົດ ເຝິກຫັດ. ນັກຮຽນຍິງທີ່ນັ່ງ ຢູ່ດ້ານຊ້າຍມືຂອງຫ້ອງຕ້ອງໄດ້ລໍຖ້າຄູຍ້າຍອອກ ເພື່ອຈະໄດ້ເຫັນສິ່ງທີ່ຄູ ຂຽນໃສ່ກະດານແລ້ວກ່າຍ ໃສ່ປຶ້ມບົດເຝິກຫັດ. ໃນຂະນະທີ່ຄູຂຽນ, ຄູກໍຖາມນັກຮຽນວ່າ "ພວກນ້ອງ ໄດ້ກ່າຍ ບົດເລື່ອງ ທີ່ຄູກຳລັງຂຽນໃສ່ກະ ດານນີ້ບໍ່?" ທຸກຄົນຕອບ "ໄດ້ຂຽນ".

<u>ຫ້ອງຮຽນ ຂ</u> :

ນັກຮຽນ 2 ກຸ່ມ ກຳລັງນັ່ງຢູ່ກັບພື້ນເປັນວົງມົນສອງວົງ. ທັງສອງກຸ່ມ ປະກອບດ້ວຍເດັກຍິງ ແລະ ເດັກຊາຍ. ຄູຫ້ອງ ປ.3 ພວມສອນກ່ຽວກັບຮູບເລຂາຄະນິດຕ່າງໆ ໃຫ້ແກ່ນັກຮຽນ. ຢູ່ໃນກຸ່ມທີໜຶ່ງ,

ເດັກພວມສົນທະນາ ກັນກ່ຽວກັບຮູບວົງກົມ. ຄູໄດ້ສະແດງວັດຖຸສິ່ງຂອງທີ່ເປັນຮູບວົງມົນມີຢູ່ທົ່ວໄປ ເຊິ່ງຄູໄດ້ຂໍໃຫ້ເດັກຫາມາຈາກ ບ້ານກ່ອນໜ້ານີ້. ເດັກໄດ້ຈັບສິ່ງຂອງຕ່າງໆນັ້ນແລ້ວ ກໍເຮັດວຽກຮ່ວມ ກັນ ເພື່ອຂຽນລາຍການວັດຖຸສິ່ງຂອງ ອັນອື່ນໆ ທີ່ມີລັກສະນະເປັນຮູບວົງມົນ.

ໃນອີກກຸ່ມໜຶ່ງ, ເດັກຈຳນວນໜຶ່ງພວມຖືກ້ຳໜັງສືພິມທີ່ຄ້າຍຄືກັບໄມ້ຍາວໆ. ຄູຮຽກຊື່ເລກ ໝາຍແລ້ວ ເດັກທີ່ມີກ້ຳໜັງສືພິມໝາຍເລກ ນັ້ນກໍວາງມັນລົງໃສ່ລະຫວ່າງກາງຂອງພື້ນຫ້ອງ ເພື່ອປະ ກອບຮູບ ສີ່ຫຼ່ຽມ. ເດັກຜູ້ໜຶ່ງທີ່ມີ ບັນຫາດ້ານການ ໄດ້ຍິນຕື່ມກ້ຳໜັງສືພິມ ຂອງລາວເພື່ອປະກອບ ເປັນຮູບ ສາມຫຼ່ຽມ ແລະ ຍົ້ມໃສ່ຄູ. ຄູຍົ້ມຕອບ ແລະ ເວົ້າວ່າ “ດີຫຼາຍ” ໂດຍແນ່ໃຈວ່າເດັກຄົນນັ້ນ ສາມາດເຫັນຮິມສົບຂອງລາວຕອນເວົ້າ. ຜູ້ປົກຄອງທ່ານໜຶ່ງທີ່ເປັນອາສາສະໝັກຊ່ວຍຫ້ອງຮຽນມາ ໄດ້ໜຶ່ງ ອາທິດ ກໍຕົບທີ່ແຂນຂອງເດັກຄົນນັ້ນເບົາໆ ແລ້ວກໍຫັນໄປຊ່ວຍນັກຮຽນຜູ້ອື່ນ ທີ່ຍັງງົງວ່າຈະ ວາງກ້ຳໜັງສືພິມໃສ່ບ່ອນໃດ ເພື່ອປະກອບເປັນຮູບອື່ນໆ.

ກະລຸນາຕອບຄຳຖາມດັ່ງຕໍ່ໄປນີ້:

- ຫ້ອງຮຽນຫ້ອງໃດທີ່ທ່ານເຊື່ອວ່າເປັນຫ້ອງຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້?
- ບ່ອນໃດທີ່ສະແດງໃຫ້ເຫັນວ່າເປັນຫ້ອງຮຽນຮ່ວມແລະເປັນເພື່ອນມິດໃນການຮຽນ?

ໃຫ້ທ່ານ ລະດົມສະໝອງຂຽນຄຳຕອບລົງດັ່ງລຸ່ມນີ້:

1. _____
2. _____
3. _____
4. _____
5. _____

ໃຫ້ປຽບທຽບສິ່ງທີ່ທ່ານຂຽນກັບເພື່ອນຂອງທ່ານ. ມີຂໍ້ໃດແດ່ທີ່ເໝືອນກັນ? ມີຂໍ້ໃດທີ່ແຕກ ຕ່າງ? ທ່ານອາດຈະມີຄຳຕອບທີ່ແຕກຕ່າງກັນ.

II. ຄຸນລັກສະນະ ແລະ ອົງປະກອບຂອງຫ້ອງຮຽນຮ່ວມ ແລະ ເປັນມິດໃນການຮຽນຮູ້.

1 ຄຸນລັກສະນະ.

ບາງຄຳຕອບໃນຕາຕະລາງຂ້າງລຸ່ມຈະນຳສະເໜີບາງຂໍ້ແຕກຕ່າງລະຫວ່າງ ຫ້ອງຮຽນແບບເກົ່າ ແລະ ຫ້ອງຮຽນແບບມີສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນ ມິດໃນການຮຽນຮູ້. ທ່ານ ອາດສາມາດ ຄົ້ນຄິດສິ່ງອື່ນໆ ໄດ້ອີກຫຼາຍຢ່າງ ໂດຍສະເພາະທີ່ສຳຄັນກໍຄື ຢູ່ໃນສ່ວນຂອງ “ການພົວພັນ” ຢູ່ໃນຫ້ອງຮຽນຮ່ວມ,

ສະພາບແວດລ້ອມ	ຫ້ອງຮຽນແບບເກົ່າ	ຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້
ການພົວພັນ	ຄູເວົ້າກັບນັກຮຽນ ແບບປິ່ນຫຼັງໃສ່ກັນ	ເປັນມິດ ແລະ ອົບອຸ່ນ. ຄູນັ່ງຂ້າງໆ ແລະ ຍິ້ມແຍ້ມກັບເດັກທີ່ມີບັນຫາດ້ານການ ໄດ້ຍິນສຽງ. ອາດຈະມີຜູ້ປົກຄອງທີ່ເປັນຜູ້ຊ່ວຍ ຄູ, ຊົມເຊີຍ ເດັກຄົນນີ້ ແລະ ຊ່ວຍເດັກຜູ້ອື່ນໆ.
ມີໃຜຢູ່ໃນ ຫ້ອງຮຽນ	ຄູກໍຄືເດັກນັກຮຽນມີ ຄວາມສາມາດ ທີ່ຄ້າຍຄືກັນ	ຄູ, ນັກຮຽນທີ່ມີພື້ນຖານ ແລະ ຄວາມສາມາດ ແຕກຕ່າງຫຼາກຫຼາຍ ແລະ ຜູ້ອື່ນໆເຊັ່ນ ຜູ້ປົກ ຄອງທີ່ມາຊ່ວຍເຫຼືອ
ການຈັດບ່ອນນັ່ງ	ມີການຈັດບ່ອນນັ່ງເໝືອນກັນທຸກ ຫ້ອງຮຽນ (ເດັກທຸກຄົນນັ່ງເປັນ ແຖວ, ເດັກຍິງ ແລະ ເດັກຊາຍນັ່ງ ແຍກກັນ ຢູ່ຄົນລະຝ່າຍ)	ການຈັດບ່ອນນັ່ງມີຄວາມແຕກຕ່າງເຊັ່ນ ເດັກຍິງ ແລະ ເດັກຊາຍໄດ້ນັ່ງຢູ່ພື້ນຫ້ອງຮ່ວມ ກັນເປັນ ວົງສອງວົງ ຫຼື ນັ່ງຮ່ວມໂຕະດຽວກັນ.
ສື່ອຸປະກອນການ ສອນ	ປຶ້ມຕຳລາແບບຮຽນ,ປຶ້ມບົດເຝິກຫັດ, ກະດານນ້ອຍ ແມ່ນມີສະເພາະແຕ່ ຄູ ຫຼື ນັກຮຽນບາງຄົນ.	ສື່ /ອຸປະກອນການຮຽນ-ການສອນມີຫຼາກຫຼາຍ ສຳລັບເດັກທຸກຄົນເຊັ່ນສື່ການສອນຄະນິດສາທີ່ ເຮັດຈາກ ໜັງສືພິມເກົ່າ ຫຼື ແຜ່ນໂປສະເຕີ ແລະຕຸກກະຕາສຳລັບຮຽນ ວິຊາພາສາ.
ຊັບພະຍາກອນ	ຄູມີປະຕິສຳພັນກັບເດັກໂດຍປາສະ ຈາກ ການໃຊ້ສື່ການສອນເພີ້ມເຕີມ ໃດໆ.	ຄູວາງແຜນການສອນລ່ວງໜ້າ ເພື່ອຈະສອນ. ຄູໃຫ້ເດັກມີສ່ວນຮ່ວມໃນການ ນຳສື່ການຮຽນ-ການສອນມາຫ້ອງຮຽນ ແລະ ສື່ເຫຼົ່ານີ້ກໍບໍ່ໄດ້ ມີການໃຊ້ຈ່າຍຫຍັງ.
ການປະເມີນຜົນ	ໃຊ້ຂໍ້ສອບແບບຂຽນທີ່ເປັນມາດຕະ ຖານ	ມີການປະເມີນແບບຕົວຈິງ; ມີການສັງເກດ; ມີ ຕົວຢ່າງຜົນງານຂອງເດັກ ຕະຫຼອດ ເວລາ ເຊັ່ນ: ປຶ້ມບັນທຶກຜົນງານ (Portfolio)

ໃຫ້ທ່ານພິຈາລະນາປຽບທຽບຄວາມຄິດຂອງທ່ານກັບແຜນວາດລຸ່ມນີ້ :



ສິ່ງທີ່ຄວນຈື່: ການປ່ຽນແປງຈາກໂຮງຮຽນ ຫຼື ຫ້ອງຮຽນແບບເກົ່າ ໃຫ້ເປັນຫ້ອງຮຽນທີ່ມີລັກສະນະ ຮຽນຮ່ວມ ແລະ ເປັນເພື່ອນມິດນັ້ນ ເປັນຂະບວນວິວັດທີ່ຕໍ່ເນື່ອງ. ມັນບໍ່ແມ່ນເຫດການອັນໃດອັນໜຶ່ງ ແລະ ມັນກໍບໍ່ໄດ້ ເກີດຂຶ້ນໃນຊົ່ວຂ້າມຄືນ, ມັນຕ້ອງໄດ້ໃຊ້ເວລາ ແລະທີມງານ. ນອກຈາກນີ້ ມັນຍັງ ສາມາດທີ່ຈະໃຫ້ຜົນ ປະໂຫຍດຫຼາຍຢ່າງສຳລັບພວກເຮົາໃນການປະກອບອາຊີບຄູ ແລະ ສຳຄັນທີ່ ສຸດແມ່ນ ສຳລັບເດັກນ້ອຍ ຂອງພວກເຮົາ, ຄອບຄົວ ແລະ ຊຸມຊົນຂອງເຂົາ.

2. ອົງປະກອບບາງຢ່າງທີ່ສະແດງອອກເຖິງການຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້

ກ. ການພົວພັນຄອບຄົວ ແລະ ຊຸມຊົນ.

ຊຸມຊົນແມ່ນບ່ອນທີ່ເດັກອາໄສຢູ່ ແລະ ເປັນແຫຼ່ງແຫ່ງການຮຽນຮູ້ ແລະ ເກັບກ່ຽວປະສົບການ, ເປັນ ບ່ອນທີ່ເຂົານຳໃຊ້ສິ່ງທີ່ພວກເຮົາໄດ້ສິດສອນພວກເຂົາ. ຄຸນຄ່າ ແລະ ການເຂົ້າມີສ່ວນຮ່ວມ

ຂອງຄອບຄົວ, ຜູ້ນຳຊຸມຊົນ ແລະ ສະມາຊິກຊຸມຊົນ ແມ່ນມີຄວາມສຳຄັນທີ່ສຸດ ເພື່ອຈະນຳເອົາເດັກ ທຸກຄົນເຂົ້າໂຮງຮຽນ ແລະ ຊ່ວຍເຫຼືອ ໃຫ້ພວກເຂົາຮຽນຈົນສຳເລັດຜົນ. ເມື່ອໃດຫາກຊຸມຊົນຮູ້ສຶກວ່າ ຕົນເອງມີຄວາມຜູກພັນຕໍ່ໂຮງຮຽນ,ເມື່ອນັ້ນຈະເຮັດໃຫ້ຊຸມຊົນໃຫ້ການສະໜັບສະໜູນຕໍ່ໂຮງຮຽນຫຼາຍ ຂຶ້ນ.

ຂ. ບົດບາດຍິງ-ຊາຍ:

ໃນສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ແຕ່ລະຄົນ ແລກ ປ່ຽນທັດສະນະຄວາມຄິດເຫັນລວມ ກ່ຽວກັບວິທີທີ່ເດັກຈະເຮັດວຽກ(ຮຽນ) ແລະ ຫຼິ້ນຮ່ວມກັນ. ພວກເຂົາ ເຊື່ອວ່າ ການສຶກສາຈຳເປັນຕ້ອງມີລັກສະນະຮຽນຮ່ວມ, ມີຄວາມຍຸຕິທຳໃນບົດບາດຍິງ-ຊາຍ (ເດັກຍິງມີສິດ ແລະ ໂອກາດເໝືອນກັບເດັກຊາຍ) ແລະ ບໍ່ມີການຈຳແນກ, ມີຄວາມ ລະອຽດ ອ່ອນຕໍ່ທຸກວັດທະນະທຳ ກໍຄື ຕ້ອງສອດຄ່ອງພົວພັນກັບຊີວິດປະຈຳວັນຂອງເດັກ ແລະ ຄອບຄົວຂອງ ເຂົາ. ຄູສອນ, ຜູ້ບໍລິຫານ ແລະ ນັກຮຽນ ໃຫ້ຄວາມເຄົາລົບນັບຖື ແລະ ຮັບເອົາຄວາມແຕກຕ່າງຫຼາກ ຫຼາຍທາງພາສາ, ວັດທະນະທຳ ແລະ ຄວາມສາມາດ.

ຄ. ຄວາມປອດໄພ, ການປົກປ້ອງ ແລະ ສິ່ງເສີມສຸຂະພາບ.

ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ໄດ້ສອນເດັກ ກ່ຽວກັບ ທັກສະແລະວິຖີຊີວິດ ທີ່ຖືກສຸຂະລັກສະນະ ເພື່ອຈະສາມາດເຮັດການຕັດສິນໃຈທີ່ມີຂໍ້ມູນ ແລະ ປ້ອງກັນ ເຂົາເອງຈາກພະຍາດຕ່າງໆ ແລະ ການເຈັບເປັນ. ຍິ່ງໄປກວ່ານັ້ນ, ຢູ່ໃນສະພາບ ແວດລ້ອມທີ່ເປັນການ ຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຈະບໍ່ມີການຂົ່ມຂູ່ເດັກ, ບໍ່ມີໄມ້ແສ້ແລະບໍ່ມີ ການລົງໂທດທາງຮ່າງກາຍຂອງເດັກ ຮັບປະກັນໃຫ້ເດັກທຸກຄົນມີສຸຂະພາບດີ, ໄດ້ຮັບການປົກປ້ອງ ແລະ ສາມາດຈະຮຽນຮູ້ ໄດ້. ນີ້ແມ່ນ ພາກສ່ວນທີ່ສຳຄັນຂອງສະພາບແວດລ້ອມ ທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການ ຮຽນຮູ້. ເຄື່ອງມືນີ້ ຈະນຳສະເໜີກິດຈະກຳຕ່າງໆ ທີ່ສາມາດນຳໄປໃຊ້ ເພື່ອໂຄສະນາເຜີຍແຜ່ນະໂຍບາຍ ສົ່ງເສີມສຸຂະພາບໃນໂຮງຮຽນ, ເພື່ອສ້າງ ຂໍ້ຕົກລົງທົ່ວໄປຮ່ວມກັນ ສຳລັບການປະຕິບັດລວມທັງຂໍ້ກຳນົດ ທີ່ລະບຸວ່າ: ນະໂຍບາຍອັນໃດມີ ຄວາມຈຳເປັນທີ່ຮີບດ່ວນ. ການປັບປຸງສຸຂະພາບ ແລະ ການຮຽນຮູ້ຂອງ ເດັກໂດຍຜ່ານໂຄງການ ສົ່ງເສີມສຸຂະພາບ ແລະ ການປົກປ້ອງໃນໂຮງຮຽນບໍ່ແມ່ນສິ່ງໃໝ່. ມີຫຼາຍໂຮງຮຽນ ທີ່ມີໂຄງການ ດັ່ງກ່າວຍ້ອນວ່າ ພວກເຂົາຮູ້ດີວ່າ: ຄວາມສາມາດຂອງເດັກ ທີ່ຈະໄດ້ຮັບການພັດທະນາຢ່າງເຕັມ ທີ່ຂຶ້ນກັບການມີສຸຂະພາບດີ, ມີໂພຊະນາການດີ ແລະ ສະພາບແວດລ້ອມຂອງການຮຽນຮູ້ທີ່ປອດ ໄພ. ມີແຕ່ເມື່ອໃດຫາກເດັກມີຄວາມຮູ້ສຶກປອດໄພທີ່ສຸດເທົ່ານັ້ນ ເດັກຈຶ່ງຈະສາມາດທີ່ຈະຮຽນຮູ້ໄດ້ ຢ່າງເຕັມທີ່.

ງ. ການພົວພັນເຖິງຊີວິດປະຈຳວັນຂອງເດັກ.

ສະພາບແວດລ້ອມທີ່ເປັນການຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້ຈະຊຸກຍູ້ສິ່ງເສີມຄູ ແລະ ຜູ້ບໍລິຫານ, ເດັກນັກຮຽນ, ຄອບຄົວ ແລະ ຊຸມຊົນຊ່ວຍເດັກໃຫ້ຮຽນຮູ້ພາຍໃນ ແລະ ນອກຫ້ອງຮຽນ. ຢູ່ໃນ ຫ້ອງຮຽນ, ທັງເດັກແລະຄູຕ່າງກໍມີຄວາມຮັບຜິດຊອບຕໍ່ການຮຽນຮູ້ຂອງພວກເຂົາ ແລະ ການມີສ່ວນຮ່ວມ ຢ່າງຕັ້ງໜ້າໃນ ນັ້ນການຮຽນຮູ້ໄດ້ເຊື່ອມໂຍງກັບສິ່ງທີ່ເດັກຕ້ອງການທີ່ຈຳເປັນໃນຊີວິດ (ຄວາມປາດຖະໜາຂອງເຂົາ) ແລະ ມັນມີຄວາມໝາຍສຳລັບຊີວິດປະຈຳວັນຂອງເຂົາເຈົ້າ.

ຈ. ການໃຫ້ກຳລັງໃຈ.

ສະພາບແວດລ້ອມທີ່ເປັນການຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້ ບໍ່ພຽງແຕ່ຊຸກຍູ້ເດັກເທົ່ານັ້ນ ແຕ່ມັນຍັງພິຈາລະນາເຖິງຄວາມຈຳເປັນ, ຄວາມສົນໃຈ ແລະ ຄວາມປາຖະໜາໃຫ້ແກ່ຄູນຳອີກ. ມັນສະໜອງໂອກາດ ໃຫ້ພວກເຮົາໃນຖານະທີ່ເປັນຄູເພື່ອຮຽນຮູ້ວິທີສິດສອນທີ່ດີຂຶ້ນ; ມັນສະໜອງຊັບພະຍາກອນທີ່ດີທີ່ສຸດ ເທົ່າທີ່ເປັນໄປໄດ້ ສຳລັບການສິດສອນ ແລະ ມັນຊື່ນຊົມຍິນດີກັບຄວາມສຳເລັດຂອງພວກເຮົາ ໂດຍຜ່ານການໃຫ້ລາງວັນຊົມເຊີຍ ແລະ ການຍອມຮັບທີ່ເໝາະສົມ.

III. ຄຸນປະໂຫຍດທີ່ຈະໄດ້ຮັບຈາກສະພາບແວດລ້ອມຂອງການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

1. ຜົນປະໂຫຍດທີ່ເດັກຈະໄດ້ຮັບ.

ໂດຍຜ່ານສະພາບແວດລ້ອມທີ່ເປັນການຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້, ເດັກຈະກາຍເປັນຜູ້ ມີຄວາມເຊື່ອໝັ້ນໃນຕົວເອງຫຼາຍຂຶ້ນ ແລະ ຈະພັດທະນາຄວາມພາກພູມໃຈ ໃນຕົນເອງສູງຂຶ້ນດ້ວຍ. ພວກເຂົາຈະໄດ້ຄວາມພາກພູມໃຈໃນຕົວເອງ ແລະ ຜົນສຳເລັດຂອງເຂົາ. ພວກເຂົາໄດ້ຮຽນຮູ້ວິທີຮຽນຢ່າງ ເປັນອິດສະຫຼະຢູ່ທັງພາຍໃນ ແລະ ພາຍນອກໂຮງຮຽນ. ຕົວຢ່າງ: ພວກເຂົາສາມາດຮຽນຮູ້ວິທີຖາມຄຳຖາມ ທີ່ດີ. ພວກເຂົາຮຽນຮູ້ເພື່ອທີ່ຈະເຂົ້າໃຈ ແລະ ນຳໃຊ້ສິ່ງທີ່ໄດ້ຮຽນຮູ້ໃນໂຮງຮຽນ ເຂົ້າໃນຊີວິດປະຈຳວັນເຊັ່ນ: ໃຊ້ຢູ່ໃນການຫຼິ້ນ ແລະ ໃຊ້ຢູ່ເຮືອນຂອງເຂົາ. ພວກເຮົາຍັງໄດ້ຮຽນຮູ້ການ ປະຕິສຳພັນຢ່າງຕັ້ງໜ້າ, ມ່ວນຊື່ນ ກັບເພື່ອນຮ່ວມຫ້ອງ ແລະ ຄູ. ພວກເຂົາໄດ້ຮຽນຮູ້ຄວາມສະໜຸກສະໜານ ໃນການຢູ່ກັບຜູ້ອື່ນທີ່ມີຄວາມແຕກຕ່າງຈາກຕົນເອງ ລວມທັງວິທີທີ່ຈະເປັນຜູ້ມີຄວາມລະອຽດອ່ອນ ແລະ ປັບຕົວເຂົ້າໃນສິ່ງທີ່ແຕກຕ່າງເຫຼົ່ານີ້. ເດັກທຸກຄົນໄດ້ຮຽນຮູ້ດ້ວຍກັນ ແລະຕີລາຄາໄດ້ໃນການພົວພັນຂອງຕົນກັບຄົນອື່ນໂດຍບໍ່ກ່ຽວຂ້ອງ ເລື່ອງພື້ນຖານ ຫຼື

ຄວາມສາມາດຂອງຕົນ. ເດັກຍັງ ຈະກາຍເປັນຜູ້ມີຫົວຄິດປະດິດສ້າງ ແລະ ຮູ້ປັບປຸງການຮຽນຮູ້ ໃຫ້ດີຂຶ້ນເລື້ອຍໆ. ພວກເຂົາຮຽນຮູ້ທີ່ຈະຕີລາຄາສູງຕໍ່ພາສາທ້ອງຖິ່ນຂອງເຂົາ, ຊາບຊຶ້ງເຂົ້າໃຈຮີດ ຄອງປະເພນີ/ວັດທະນະທຳ ແລະ ຮຽນຮູ້ທີ່ຈະພິຈາລະນາວ່າ : ຕົນເອງກໍມີຄວາມແຕກຕ່າງຈາກຄົນ ອື່ນ ແລະ ເປັນຜູ້ໜຶ່ງທີ່ພິເສດເໝືອນກັບຄົນອື່ນໃນສັງຄົມ. ໂດຍຜ່ານສະພາບແວດລ້ອມ ທີ່ເປັນການ ຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ເດັກຈະປັບປຸງທັກສະດ້ານການສື່ສານ ແລະ ເປັນຜູ້ທີ່ໄດ້ຮັບການກະກຽມເພື່ອຊີວິດທີ່ດີກວ່າເດັກໄດ້ຮັບ ຫຼື ສາມາດທີ່ຈະໄດ້ຮັບຄວາມເຄົາລົບນັບ ຖືໃນຕົນເອງ ໃນຂະນະທີ່ ເຂົາໄດ້ຮຽນຮູ້ເພື່ອ ເຄົາລົບນັບຖື ຄົນອື່ນ.

2. ຜົນປະໂຫຍດທີ່ຄູຈະໄດ້ຮັບ.

ຄູກໍໄດ້ຮັບຜົນປະໂຫຍດທີ່ສຳຄັນຈາກການສິດສອນ ໃນສະພາບແວດລ້ອມ ທີ່ເປັນການຮຽນ ຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຄູມີໂອກາດຫຼາຍຂຶ້ນທີ່ຈະຮຽນຮູ້ວິທີສິດສອນແບບໃໝ່ ເພື່ອສອນເດັກ ປະເພດຕ່າງໆ. ພວກເຂົາໄດ້ຮັບຄວາມຮູ້ໃໝ່ເຊັ່ນ: ວິທີຮຽນຮູ້ທີ່ແຕກຕ່າງກັນຂອງເດັກ ແຕ່ລະຄົນ. ອີກປະການໜຶ່ງ ກໍຄື ໃນຂະນະທີ່ພວມຊອກຫາຊ່ອງທາງ ເພື່ອເອົາຊະນະບັນດາສິ່ງທ້າ ທາຍ, ພວກເຂົາສາມາດ ທີ່ຈະພັດທະນາທັດສະນະຄະຕິ ແລະ ວິທີການເຂົ້າເຖິງຄົນອື່ນ ແລະ ສະຖານະການຕ່າງໆໄດ້ຖືກຕ້ອງ. ດັ່ງນັ້ນ ການສິດສອນຈຶ່ງກາຍເປັນຄວາມມ່ວນຊື່ນບໍ່ແມ່ນເລື່ອງ ໜ້າເບື່ອ.

ຄູຍັງມີໂອກາດຫຼາຍຂຶ້ນ ທີ່ຈະສຳຫຼວດຄົ້ນຄວ້າແນວຄິດໃໝ່ໆ ໂດຍການສື່ສານທີ່ຂຶ້ນກັບ ຜູ້ອື່ນທັງ ພາຍໃນ ແລະ ນອກໂຮງຮຽນຫຼາຍຂຶ້ນ ເຊັ່ນ ໃນກຸ່ມໂຮງຮຽນ ແລະ ໂຮງຮຽນອື່ນໆ ຫຼື ເຄືອຂ່າຍຂອງຄູ. ໂດຍການນຳໃຊ້ແນວຄິດໃໝ່ເຫຼົ່ານີ້, ຄູຈະສາມາດກະຕຸກຊຸກຍູ້ນັກຮຽນ ໃຫ້ເພີ້ມ ທະວີຄວາມສົນໃຈ, ຫົວຄິດ ປະດິດສ້າງ ແລະ ຄວາມຕັ້ງໃຈຫຼາຍຂຶ້ນ. ດ້ວຍເຫດດັ່ງກ່າວ, ທັງເດັກ ແລະ ຜູ້ປົກຄອງກໍຈະສາມາດ ໃຫ້ຂໍ້ ຄິດເຫັນສະທ້ອນກັບມາໃນທາງທີ່ດີໄດ້. ພ້ອມກັນນັ້ນ ພວກ ເຂົາຍັງຈະສາມາດໄດ້ຮັບການສະໜັບສະໜູນເພີ້ມທະວີຂຶ້ນຈາກຊຸມຊົນ ແລະ ໄດ້ຮັບການຊົມ ເຊີຍຕອບແທນຜົນງານທີ່ພວກເຂົາພວມເຮັດຢູ່.

ຄູສາມາດຈະປະສົບກັບຄວາມເພິ່ງພໍໃຈໃນວຽກງານເພີ້ມຂຶ້ນ ແລະ ມີຄວາມຮູ້ສຶກທີ່ດີຂຶ້ນກັບ ຜົນສຳ ເລັດ ເມື່ອເຫັນເດັກທຸກຄົນບັນລຸຜົນສຳເລັດໃນໂຮງຮຽນຕາມຄວາມສາມາດສູງສຸດຂອງເຂົາ. ເຖິງຢ່າງໃດ ກໍຕາມ, ທ່ານຄວນຄຳນຶງວ່າ: “ເດັກທຸກຄົນມີຜົນສຳເລັດ” ໝາຍຄວາມວ່າເດັກທຸກຄົນ ເສັງຜ່ານພາກຂຽນໄດ້ສຳເລັດ ມັນໝາຍເຖິງການຍອມຮັບຄວາມຫຼາກຫຼາຍ ໃນວິທີການຮຽນຮູ້ທີ່ ແຕກຕ່າງກັນຂອງເດັກ ລວມ ທັງວິທີທີ່ເຂົາ ສະແດງຜົນສຳເລັດໃນການຮຽນຮູ້ຂອງເຂົາອອກມາ;

ຕົວຢ່າງ: ພວກເຂົາສາມາດອະທິບາຍແນວຄວາມຄິດລວມຍອດໃດໜຶ່ງໃຫ້ຄູໄດ້ ຖືວ່າເປັນຜົນສຳເລັດ ແທນ ທີ່ຈະເປັນການຕອບຄຳຖາມໃນການສອບເສັງພາກຂຽນເທົ່ານັ້ນ. ອີກປະການໜຶ່ງ, ຄູອາດຊຸກຍູ້

ໃຫ້ມີອາສາສະໝັກຫຼາຍຄົນຕື່ມ ໃນການເຮັດວຽກໃນຫ້ອງຮຽນ ເຊິ່ງຈະຫຼຸດຜ່ອນຄວາມໜັກໜ່ວງ ໃນການສອນຂອງຄູ.

3. ປະໂຫຍດທີ່ພໍ່ແມ່/ຜູ້ປົກຄອງຈະໄດ້ຮັບ.

ໂດຍຜ່ານສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ພໍ່ແມ່/ຜູ້ ປົກຄອງໄດ້ຮຽນຮູ້ຫຼາຍຂຶ້ນ ກ່ຽວກັບລູກຫຼານຂອງຕົນວ່າໄດ້ຮັບການສຶກສາອົບຮົມຄືແນວໃດ. ພວກເຂົາ ໄດ້ກາຍເປັນຜູ້ທີ່ມີສ່ວນຮ່ວມດ້ວຍຕົນເອງ ແລະ ຖືເປັນຄວາມສຳຄັນທີ່ຈະໄດ້ຊ່ວຍລູກຫຼານ ຕົນເອງ ໃນການຮຽນຮູ້. ເມື່ອຄູຂໍຄຳເຫັນຈາກພວກເຂົາກ່ຽວກັບເດັກ, ພວກເຂົາເຈົ້າຈະຮູ້ສຶກວ່າມີຄຸນ ຄ່າ ແລະ ພິຈາລະນາ ຕົນເອງວ່າມີສ່ວນທີ່ເທົ່າທຽມກັບຜູ້ອື່ນ ໃນການສະໜອງໂອກາດການຮຽນຮູ້ທີ່ ມີຄຸນນະພາບ ສຳລັບລູກ ຫຼານຂອງຕົນ. ຜູ້ປົກຄອງຍັງສາມາດຮຽນຮູ້ວິທີແກ້ບັນຫາ ກ່ຽວກັບລູກຫຼານ ຂອງຕົນໄດ້ດີຂຶ້ນ ໂດຍນຳໃຊ້ ເຕັກນິກຕ່າງໆ ທີ່ຄູໃຊ້ໃນໂຮງຮຽນ. ນອກນີ້ພວກເຂົາຍັງໄດ້ຮຽນຮູ້ ທີ່ຈະປະຕິສຳພັນກັບຄົນອື່ນໆໃນຊຸມຊົນ ລວມທັງ ເຂົ້າໃຈ ແລະ ໃຫ້ການຊ່ວຍເຫຼືອແກ້ບັນຫາຂອງ ກັນ ແລະ ກັນອີກດ້ວຍ. ສິ່ງສຳຄັນທີ່ສຸດ ກໍຄື ພວກເຂົາຮູ້ວ່າລູກຫຼານຂອງເຂົາ ແລະ ເດັກທຸກຄົນພວມ ໄດ້ຮັບການສຶກສາທີ່ມີຄຸນນະພາບ.

4. ຜົນປະໂຫຍດທີ່ຊຸມຊົນຈະໄດ້ຮັບ

ສະພາບແວດລ້ອມທີ່ເປັນການຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້ສາມາດທີ່ຈະໃຫ້ ຜົນປະໂຫຍຫຼາຍຢ່າງຕໍ່ຊຸມຊົນໄດ້ ເຊັ່ນ: ຊຸມຊົນຈະມີຄວາມຮູ້ສຶກພາກພູມໃຈ ໃນເມື່ອເດັກໄປໂຮງ ຮຽນ ແລະ ໄດ້ຮຽນຮູ້ ຫຼາຍຂຶ້ນ. ພວກເຂົາຈະຄົ້ນພົບວ່າມີ “ຜູ້ນຳຊຸມຊົນໃນອະນາຄົດ” ມີຈຳນວນຫຼາຍ ຂຶ້ນ ເຊິ່ງພວກເຂົາ ມີຄວາມກຽມພ້ອມທີ່ຈະເຂົ້າມີສ່ວນຮ່ວມຢ່າງຕັ້ງໜ້າໃນສັງຄົມ. ຊຸມຊົນຈະເຫັນວ່າ ບັນຫາສັງຄົມທີ່ອາດຈະເກີດຂຶ້ນ ເຊັ່ນ: ອາດຊະຍາກຳເລັກໆນ້ອຍໆ ຫຼື ບັນຫາຂອງໄວລຸ້ນອາດຈະ ລົດລົງ. ສະມາຊິກຊຸມຊົນຈະເຂົ້າມາປະກອບສ່ວນໃນໂຮງຮຽນຫຼາຍຂຶ້ນ, ມີການພົວພັນລະຫວ່າງ ໂຮງຮຽນ ແລະ ຊຸມຊົນດີຂຶ້ນກວ່າເກົ່າ.

ຄຳຖາມ.

ຈົ່ງບອກຄວາມໝາຍ ຂອງການຮຽນຮ່ວມ ແລະ ການເປັນເພື່ອນມິດໃນການຮຽນຮູ້ມີແນວ ໃດແດ່ ?

1. ເປັນຫຍັງການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການ ຮຽນຮູ້ ຈຶ່ງມີຄວາມສຳຄັນ ?
2. ອົງປະກອບທີ່ສຳຄັນຂອງສະພາບແວດລ້ອມການຮຽນຮ່ວມ ແລະ ເປັນເພື່ອນມິດໃນການ ຮຽນຮູ້ມີ ຫຍັງແດ່ ?

3. ກະລຸນາຂຽນແນວຄວາມຄິດຂອງທ່ານກ່ຽວກັບຄຸນລັກສະນະສະພາບແວດລ້ອມການຮຽນຮ່ວມແລະ ເປັນເພື່ອນມິດໃນການຮຽນຮູ້ມີຫຍັງແດ່ ? ແລະ ສິ່ງໃດທີ່ຄວນເອົາໃຈໃສ່ ?
4. ພາກສ່ວນໃດແດ່ທີ່ໄດ້ຮັບຜົນປະໂຫຍດຈາກການປ່ຽນແປງສະພາບແວດລ້ອມທີ່ເປັນການຮຽນຮ່ວມແລະ ເປັນເພື່ອນມິດໃນການຮຽນຮູ້ ?

– ຈົ່ງອະທິບາຍຜົນປະໂຫຍດທີ່ໄດ້ຮັບຂອງແຕ່ພາກສ່ວນ.

5. ນອກຈາກຜົນປະໂຫຍດທີ່ກ່າວມາຂ້າງເທິງນັ້ນທ່ານຄິດວ່າຍັງມີອັນແດ່ທີ່ບໍ່ທັນໄດ້ເວົ້າເຖິງ?

ບົດທີ 2 : ການສຶກສາສະພາບບັນຫາ, ວິທີສ້າງ ແລະ ການຮັກສາສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ໃຫ້ຍືນຍົງ

ແບບຟອມຂ້າງລຸ່ມນີ້ ຈະຊ່ວຍປະເມີນໂຮງຮຽນຂອງທ່ານ. ກະລຸນາຕື່ມໃສ່ຊ່ອງຫວ່າງ ດ້ວຍຄວາມຈິງໃຈເທົ່າທີ່ເປັນໄປໄດ້. ໂດຍການໝາຍ (✓) ໃສ່ດ້ານໜ້າຂອງແຕ່ລະຂໍ້ ທີ່ໂຮງຮຽນຂອງທ່ານພວມປະຕິບັດຢູ່ແລ້ວ ແລະ ບໍ່ຕ້ອງເປັນຫ່ວງວ່າອາດຈະມີຫຼາຍຂໍ້ມູນທີ່ບໍ່ທັນໄດ້ຖາມ. ໂດຍຜ່ານເຄື່ອງມືນີ້, ພວກເຮົາຈະສາມາດເຮັດວຽກກັບສິ່ງເຫຼົ່ານີ້ດ້ວຍກັນ. ຫຼັງຈາກທີ່ໄດ້ໝາຍສຳເລັດໃສ່ຮ່າງປະເມີນນີ້ແລ້ວ, ທ່ານຈະໄດ້ຮັບຂໍ້ມູນ ເພື່ອຈະເລີ້ມການວາງແຜນ ແລະ ດຳເນີນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນ ເພື່ອນມິດໃນການຮຽນຮູ້ໃນໂຮງ ຮຽນຂອງທ່ານ.

I. ການສຶກສາສະພາບບັນຫາສະພາບແວດລ້ອມການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

1. ນະໂຍບາຍຂອງໂຮງຮຽນແລະການສະໜັບສະໜູນຈາກຜູ້ບໍລິຫານໂຮງຮຽນຂອງທ່ານ

____ ມີຄະນະຮັບຜິດຊອບ, ວິໄສທັດແລະນະໂຍບາຍ ກ່ຽວກັບການສຶກສາແບບຮຽນຮ່ວມ ແລະ ເປັນ ເພື່ອນມິດ ລວມທັງ ຂໍ້ຈຳກັດຕໍ່ການຈຳແນກການຮຽນຮ່ວມ;

____ ມີທະບຽນລາຍຊື່ຂອງເດັກທີ່ຢູ່ໃນເກນອາຍຸການຮຽນຢູ່ໃນຊຸມຊົນໄດ້ເຂົ້າ ແລະບໍ່ໄດ້ເຂົ້າຮຽນ;

____ ດຳເນີນການປະຊາສຳພັນເພື່ອປຸກລະດົມຊຸກຍູ້ຜູ້ປົກຄອງໃຫ້ເອົາເດັກເຂົ້າຮຽນ, ການປະຊາສຳພັນນັ້ນ ຕ້ອງເລັ່ງໃສ່ວ່າເດັກທຸກຄົນຄວນໄດ້ເຂົ້າຮຽນ ແລະ ຖືກຍິນດີຕ້ອນຮັບຈາກໂຮງຮຽນ;

____ ມີເອກະສານ ຫຼື ຊັບພະຍາກອນ ທີ່ກ່າວເຖິງການສຶກສາແບບຮຽນຮ່ວມ ສຳລັບເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ;

____ ຮູ້ຈັກວ່າອົງການຈັດຕັ້ງວິຊາຊີບ, ກຸ່ມໂຄສະນາຂົນຂວາຍ ແລະ ອົງການຈັດຕັ້ງຊຸມຊົນໃດ ທີ່ສາມາດ ສະໜອງຊັບພະຍາກອນຕ່າງໆ ສຳລັບການສຶກສາແບບຮຽນຮ່ວມ;

____ ສະແດງໃຫ້ເຫັນແນວທາງໃດໜຶ່ງວ່າຜູ້ບໍລິຫານໂຮງຮຽນ ແລະ ຄູເຂົ້າໃຈທຳມະຊາດ ແລະ ຄວາມ ສຳຄັນຂອງການສຶກສາແບບຮຽນຮ່ວມ;

____ ໄດ້ກະກຽມບັນຊີບັນດາອຸປະສັກທີ່ກີດກັນໃນການພັດທະນາສະພາບແວດລ້ອມ ທີ່ເປັນການ ຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແລະ ບັນຊີແນວທາງທີ່ຈະເອົາຊະນະອຸປະສັກ ເຫຼົ່ານີ້;

____ ມີຄວາມເຂົ້າໃຈດີໃນການປ່ຽນແປງນະໂຍບາຍໂຮງຮຽນ ແລະ ການປະຕິບັດຕ່າງໆ ທີ່ກີດກັ້ນ ເດັກຍິງ ແລະ ເດັກຊາຍບາງຄົນຈາກການໄດ້ຮັບການສຶກສາທີ່ມີຄຸນນະພາບເຊັ່ນ: ຄ່າໃຊ້ ຈ່າຍຕ່າງໆ,ຕາຕະ ລາງຮຽນປະຈຳວັນ ແລະ ອື່ນໆ.

____ ສະໜອງຄວາມຍືດຢຸ່ນໃຫ້ຄູ ເພື່ອຈະສືບຕໍ່ຕິດຕາມວິທີການສອນທີ່ເປັນນະວັດຕະກຳໃໝ່ ສຳລັບ ຊ່ວຍໃຫ້ເດັກທຸກຄົນໄດ້ຮຽນຮູ້;

____ ມີການເຊື່ອມສຳພັນກັບຊຸມຊົນ, ມີຄວາມຮັບຜິດຊອບຕໍ່ຄວາມຕ້ອງການຂອງຊຸມຊົນ ແລະ ສະໜອງໂອກາດ ເພື່ອການແລກປ່ຽນແນວຄວາມຄິດກັບຊຸມຊົນ ເພື່ອເຮັດໃຫ້ເກີດການປ່ຽນ ແປງ ເພື່ອການປະຕິບັດການຮຽນຮ່ວມ;

____ ຕອບສະໜອງຄວາມຕ້ອງການຂອງພະນັກງານ ຄູອາຈານ ແລະ ບໍ່ມີການຂົ່ມຂູ່ ແລະ ເອົາ ລັດ-ເອົາ ປຽບກັນ;

____ ມີການສະໜັບສະໜູນທີ່ມີປະສິດທິພາບ, ການນິເທດ ແລະ ລະບົບການຕິດຕາມຊ່ວຍເຫຼືອ ໃນບ່ອນທີ່ທຸກຄົນມີສ່ວນຮ່ວມໃນການຮຽນຮູ້ກ່ຽວກັບເລື່ອງນີ້ ແລະ ເຮັດເປັນເອກະສານ ບັນທຶກການປ່ຽນແປງ ໃນການປະຕິບັດການຮຽນຮ່ວມ ລວມທັງກຳນົດການຕັດສິນໃຈໃນອະ ນາຄົດ.

2. ສະພາບແວດລ້ອມໂຮງຮຽນ

____ມີສິ່ງອຳນວຍຄວາມສະດວກທີ່ກົງກັບຄວາມຕ້ອງການຂອງເດັກນັກຮຽນທຸກຄົນເຊັ່ນ ຫ້ອງນ້ຳ ແຍກຍິງ- ຊາຍ ແລະ ທາງລາດສຳລັບເດັກພິການທາງຮ່າງກາຍ;

____ມີສະພາບແວດລ້ອມທີ່ຍິນດີຕ້ອນຮັບ, ຖືກສຸຂະລັກສະນະ ແລະ ສະອາດ;

____ມີປະລິມານນ້ຳດື່ມທີ່ປອດໄພ, ສະອາດ ແລະ ບໍລິການອາຫານ ຫຼື ຂາຍອາຫານທີ່ຖືກຫຼັກອະ ນາໄມ ແລະ ຫຼັກໂພຊະນາການ;

____ມີບຸກຄະລາກອນທີ່ຫຼາກຫຼາຍ ຫຼື ມີແຜນພັດທະນາບຸກຄະລາກອນຂອງໂຮງຮຽນ (ຜູ້ຊາຍ ແລະ ຜູ້ຍິງທີ່ມີພື້ນຖານແຕກຕ່າງກັນທາງດ້ານຜິວພັນ, ຊົນຊາດຊົນເຜົ່າ, ຄວາມສາມາດດ້ານຮ່າງ ກາຍ, ສາສະ ໜາ, ພາສາ, ຖານະທາງເສດຖະກິດສັງຄົມ ແລະ ອື່ນໆ);

_____ມີບຸກຄະລາກອນ ເຊັ່ນ ຜູ້ແນະແນວ ແລະ ຄູສອນສອງພາສາເຊິ່ງເປັນ ຜູ້ທີ່ສາມາດກຳນົດ-ລະບຸ ແລະ ຊ່ວຍເຫຼືອເດັກທີ່ມີຄວາມຕ້ອງການພິເສດໃນການຮຽນຮູ້;

_____ມີຂະບວນການ ແລະ ວິທີດຳເນີນການໃນສະຖານທີ່ ເພື່ອຊ່ວຍຄູອາຈານທຸກຄົນ, ຜູ້ປົກຄອງ ແລະ ເດັກ ໃຫ້ເຮັດວຽກຮ່ວມກັນ ເພື່ອທີ່ຈະກຳນົດ/ລະບຸ ແລະ ໃຫ້ການຊ່ວຍເຫຼືອເດັກທີ່ມີ ຄວາມຕ້ອງການ ພິເສດໃນການຮຽນຮູ້;

_____ເນັ້ນໃສ່ການເຮັດວຽກເປັນທີມງານໃນໝູ່ຄູ ແລະ ນັກຮຽນ;

_____ ມີການເຊື່ອມສຳພັນກັບພະນັກງານສາທາລະນະສຸກທີ່ມີຢູ່ ເຊິ່ງເຂົາເຈົ້າຈະສະໜອງການ ກວດກາ ສຸຂະພາບໃຫ້ເດັກເປັນໄລຍະ.

3. ທັກສະ, ຄວາມຮູ້ ແລະ ທັດສະນະຄະຕິຂອງຄູ

_____ ສາມາດອະທິບາຍຄວາມໝາຍຂອງການສຶກສາແບບ “ຮຽນຮ່ວມ” ແລະ “ເປັນເພື່ອນມິດ ໃນການຮຽນຮູ້” ແລະ ສາມາດໃຫ້ຕົວຢ່າງຂອງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນ ມິດໃນການຮຽນຮູ້;

_____ ເຊື່ອວ່າເດັກທຸກຄົນ, ເດັກຍິງ, ເດັກທຸກຍາກ ຫຼື ຮັ່ງມີ, ເດັກຊົນເຜົ່າທີ່ມີພາສາແຕກຕ່າງ ລວມ ທັງເດັກພິການສາມາດຮຽນຮູ້ໄດ້;

_____ ມີສ່ວນຮ່ວມໃນການຊອກຫາເດັກໃນເກນອາຍຸຮຽນທີ່ບໍ່ໄດ້ເຂົ້າໂຮງຮຽນ ເພື່ອເບິ່ງວ່າເຂົາໄດ້ ຮັບການ ສຶກສາ;

_____ ຮູ້ກ່ຽວກັບພະຍາດຕ່າງໆທີ່ເປັນສາເຫດໃຫ້ເກີດມີບັນຫາດ້ານຮ່າງກາຍ, ອາລົມ ແລະ ການ ຮຽນຮູ້; ພ້ອມທັງສາມາດຊ່ວຍນັກຮຽນທີ່ສຸຂະພາບບໍ່ສົມບູນ ໃຫ້ໄດ້ຮັບການດູແລຢ່າງຖືກ ຕ້ອງ-ເໝາະສົມ;

_____ ໄດ້ຮັບການກວດສຸຂະພາບປະຈຳປີ ຄຽງຄູ່ກັບພະນັກງານບຸກຄະລາກອນອື່ນໆ

_____ ມີຄວາມຄາດຫວັງສູງສຳລັບເດັກທຸກຄົນ ແລະຊຸກຍູ້ສິ່ງເສີມໃຫ້ເຂົາຮຽນໃຫ້ຈົບ;

_____ ຮັບຮູ້ດີຕໍ່ຊັບພະຍາກອນທີ່ມີ ເພື່ອຊ່ວຍເຫຼືອເດັກທີ່ມີຄວາມຕ້ອງການ ການຮຽນຮູ້ພິເສດ;

_____ ສາມາດລະບຸ / ກຳນົດຄວາມລຳອຽງທາງດ້ານວັດທະນະທຳ ແລະ ບົດບາດຍິງຊາຍ ຢູ່ໃນສື່ ອຸປະກອນການສອນ, ສະພາບແວດລ້ອມຂອງໂຮງຮຽນ ແລະ ການສິດສອນຂອງເຂົາ ພ້ອມ ທັງສາມາດກວດ ເພື່ອແກ້ໄຂສິ່ງທີ່ລຳອຽງໃຫ້ຖືກຕ້ອງ;

____ ຊ່ວຍນັກຮຽນຮຽນຮູ້ທີ່ຈະກຳນົດ/ລະບຸແລະກວດແກ້ຄວາມລຳອຽງ ກ່ຽວກັບ ບົດບາດຍິງຊາຍ ແລະ ວັດທະນະທຳ ໃນສື່-ອຸປະກອນການຮຽນ;

____ ປັບປຸງຫຼັກສູດ, ບົດຮຽນ ແລະ ກິດຈະກຳຕ່າງໆຂອງໂຮງຮຽນໃຫ້ເໝາະສົມກັບຄວາມຕ້ອງການຂອງເດັກທີ່ມີ ພື້ນຖານ ແລະ ຄວາມສາມາດຫຼາກຫຼາຍ;

____ ໃຊ້ເນື້ອໃນ, ພາສາ ແລະຍຸດທະສາດໃນການສິດສອນເພື່ອຈະຊ່ວຍນັກຮຽນທຸກຄົນໄດ້ຮຽນຮູ້;

____ ສາມາດປະເມີນການຮຽນຮູ້ຂອງເດັກໃນທິດທາງທີ່ເໝາະສົມຕໍ່ຄວາມສາມາດ ແລະ ຄວາມຕ້ອງການຂອງເດັກ;

____ ຮັບຟັງການສ່ອງແສງ ແລະເປີດເຜີຍຈິງໃຈທີ່ຈະຮຽນຮູ້, ປັບໃຫ້ເໝາະສົມ, ທົດລອງ ແລະ ປ່ຽນແປງ;

____ ສາມາດເຮັດວຽກເປັນທີມງານ.

4 . ການພັດທະນາຄູ

____ ເຂົ້າຮ່ວມການປະຊຸມສຳມະນາ ຫຼື ຮຽນຮູ້ ກ່ຽວກັບ ການພັດທະນາຫ້ອງຮຽນ ແລະ ໂຮງຮຽນທີ່ມີ ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ໄດ້ຮັບການເຝິກອົບຮົມ ທາງວິຊາຊີບຂັ້ນສູງຢ່າງສະໝ່ຳສະເໝີ;

____ ນຳສະເໜີບົດກ່ຽວກັບການພັດທະນາຫ້ອງຮຽນ ທີ່ມີສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ຕໍ່ຄູຜູ້ອື່ນໆ, ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ;

____ ຮັບການສະໜັບສະໜູນຊ່ວຍເຫຼືອເພື່ອປັບປຸງຄວາມເຂົ້າໃຈເນື້ອໃນຂອງວິຊາຮຽນ(ເຊັ່ນຄະນິດສາດ)

____ ຮັບການສະໜັບສະໜູນຊ່ວຍເຫຼືອເພື່ອພັດທະນາການສອນ ແລະ ສື່ອຸປະກອນທີ່ກ່ຽວພັນກັບສະ ພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້;

____ ຮັບການສະໜັບສະໜູນຊ່ວຍເຫຼືອຈາກຜູ້ບໍລິຫານໂຮງຮຽນ ໂດຍຜ່ານການສັງເກດຢ່າງສະໝ່ຳສະເໝີ ແລະ ແຜນນິເທດທີ່ເປັນລາຍລັກອັກສອນ;

____ ມີບ່ອນເຮັດວຽກ ຫຼື ຫ້ອງພັກຜ່ອນທີ່ພວກເຂົາສາມາດກະກຽມເອກະສານສິດສອນ ແລະ ແລກປ່ຽນແນວຄວາມຄິດ;

____ ສາມາດໄປທັດສະນະຢ້ຽມຢາມໂຮງຮຽນ “ຕົວແບບ” ທີ່ມີສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

5. ເດັກນັກຮຽນ

____ ເດັກໃນເກນອາຍຸຮຽນ ທຸກຄົນຢູ່ຊຸມຊົນໄປໂຮງຮຽນປົກກະຕິ;

____ ນັກຮຽນທຸກຄົນມີປຶ້ມແບບຮຽນ ແລະ ອຸປະກອນການຮຽນທີ່ສອດຄ່ອງກັບຄວາມຕ້ອງການໃນການ ຮຽນຮູ້ຂອງເຂົາ ;

____ ນັກຮຽນທຸກຄົນໄດ້ຮັບຂໍ້ມູນການປະເມີນຜົນຢ່າງສະໝ່ຳສະເໝີ ເພື່ອຊ່ວຍເຂົາຕິດຕາມຄວາມກ້າວໜ້າຂອງຕົນ;

____ ເດັກທີ່ມີພື້ນຖານ ແລະຄວາມສາມາດຫຼາກຫຼາຍມີໂອກາດເທົ່າທຽມທີ່ຈະຮຽນຮູ້ ແລະ ສະແດງອອກໃນຫ້ອງຮຽນ ແລະ ໃນໂຮງຮຽນ;

____ ນັກຮຽນທຸກຄົນໄດ້ຮັບການຕິດຕາມ,ພົວພັນ ຖ້າພວກເຂົາບໍ່ມາໂຮງຮຽນປົກກະຕິ;

____ ນັກຮຽນທຸກຄົນມີໂອກາດເທົ່າທຽມກັນໃນການເຂົ້າຮ່ວມທຸກກິດຈະກຳຂອງໂຮງຮຽນ;

____ ນັກຮຽນທຸກຄົນຊ່ວຍພັດທະນາແນວທາງ ແລະ ລະບຽບການຕ່າງໆໃນຫ້ອງຮຽນ ແລະ ໃນໂຮງຮຽນ ໂດຍແນໃສ່ການຮຽນຮ່ວມ, ການບໍ່ຈຳແນກ, ການຕ້ານຄວາມຮຸນແຮງ ແລະ ການລະເມີດ.

6. ເນື້ອໃນວິຊາການ ແລະ ການປະເມີນຜົນ

____ ຫຼັກສູດອະນຸຍາດໃຫ້ໃຊ້ການສິດສອນ ແລະ ວິທີການຮຽນຮູ້ທີ່ແຕກຕ່າງຫຼາກຫຼາຍເຊັ່ນ ການສົນທະນາອະພິປາຍ ແລະ ການຫຼິ້ນບົດບາດສົມມຸດ;

____ ເນື້ອໃນຂອງຫຼັກສູດເຊື່ອມໂຍງກັບ ປະສົບການຊີວິດປະຈຳວັນຂອງເດັກທຸກຄົນໃນໂຮງຮຽນ ບໍ່ວ່າເຂົາຈະມີພື້ນຖານ ຫຼືຄວາມສາມາດແນວໃດກໍຕາມ;

____ ຫຼັກສູດໄດ້ແຊກຊ້ອນເຂົ້າໃນການຮູ້ອ່ານອອກຂຽນເປັນ, ການຄຳນວນ ແລະ ທັກສະຊີວິດເຂົ້າໃນທຸກຂົງເຂດວິຊາຮຽນ;

____ ຄູນຳໃຊ້ຊັບພະຍາກອນຕ່າງໆ ທີ່ມີໃນທ້ອງຖິ່ນເພື່ອຊ່ວຍເດັກຮຽນຮູ້.

____ ສື່ອຸປະກອນຫຼັກສູດ ປະກອບມີຮູບພາບ, ຕົວຢ່າງ ແລະ ຂໍ້ມູນຄວາມຮູ້ກ່ຽວກັບຄົນປະເພດທີ່ແຕກຕ່າງຫຼາກຫຼາຍ ລວມທັງ ເດັກຍິງ ແລະ ແມ່ຍິງ, ຊົນເຜົ່າ, ຄົນທີ່ມາຈາກຊັ້ນຄົນພື້ນຖານສັງຄົມ/ ເສດ ຖະກິດທີ່ແຕກຕ່າງກັນ ແລະ ຄົນພິການ;

____ ຫຼັກສູດໄດ້ຖືກປັບໃຫ້ສອດຄ່ອງກັບລະດັບແລະວິທີຮຽນຮູ້ທີ່ແຕກຕ່າງກັນ ໂດຍສະເພາະຕໍ່ກັບເດັກທີ່ມີຄວາມເປັນພິການ;

____ ເດັກທີ່ມີບັນຫາໃນການຮຽນຮູ້ມີໂອກາດທີ່ຈະທົບທວນຄືນບົດຮຽນ ແລະ ປັບປຸງໃຫ້ດີຂຶ້ນ ຫຼື ຕ້ອງມີການສອນເພີ້ມ;

____ ຫຼັກສູດ ແລະ ສື່ການຮຽນ ເປັນສິ່ງທີ່ເດັກໃຊ້ຢູ່ ທັງໃນ ແລະ ນອກໂຮງຮຽນ;

____ ຫຼັກສູດສົ່ງເສີມທັດສະນະຄະຕິ ເຊັ່ນ ການເຄົາລົບນັບຖື, ຄວາມອົດທົນ ແລະ ຄວາມຮູ້ກ່ຽວ ກັບພື້ນຖານທາງວັດທະນະທຳຂອງຕົນ ແລະ ຂອງຜູ້ອື່ນ;

____ ຄູມີເຄື່ອງມືປະເມີນຜົນຫຼາກຫຼາຍ ເພື່ອວັດຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ຂອງນັກ ຮຽນແທນທີ່ຈະຂຶ້ນກັບການເບິ່ງຄະແນນສອບເສັງພຽງຢ່າງດຽວເທົ່ານັ້ນ;

7. ຂົງເຂດວິຊາຮຽນພິເສດ / ກິດຈະກຳຫຼັກສູດເພີ່ມເຕີມ

____ ເດັກທີ່ມີຄວາມເປັນພິການທາງຮ່າງກາຍມີໂອກາດເພື່ອຫຼິ້ນ ແລະ ພັດທະນາທາງກາຍະພາບ;

____ ເດັກຍິງກໍມີການເຂົ້າເຖິງເຊັ່ນດຽວກັນ ແລະ ມີໂອກາດສຳລັບການຫຼິ້ນທາງກາຍະພາບ (ເຊັ່ນ ມີເວ ລາເທົ່າທຽມກັນທີ່ຈະຫຼິ້ນຢູ່ເດີ່ນບານ) ແລະ ກິດຈະກຳຫຼັກສູດເພີ່ມເຕີມອື່ນໆ ເໝືອນ ເດັກຊາຍ;

____ ເດັກທຸກຄົນມີໂອກາດໃນການອ່ານ, ຂຽນ ແລະ ຮຽນຮູ້ເປັນພາສາຂອງເຂົາເອງ;

____ ໂຮງຮຽນສະແດງຄວາມເຄົາລົບນັບຖືເດັກທີ່ມາຈາກທຸກໆສາສະໜາ; ເດັກມີໂອກາດຮຽນຮູ້ ກ່ຽວກັບຮີດຄອງຂອງສາສະໜາຕ່າງໆ ຕາມຄວາມເໝາະສົມໃນມື້ເຂົ້າຮຽນ;

8. ຊຸມຊົນ

____ ກຸ່ມພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນຮູ້ກ່ຽວກັບ ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນ ເພື່ອນມິດໃນການຮຽນຮູ້ ແລະ ສາມາດຊ່ວຍເຫຼືອໂຮງຮຽນ ໃຫ້ກາຍເປັນສະພາບແວດ ລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້;

____ ຊຸມຊົນຊ່ວຍເຫຼືອໂຮງຮຽນໃຫ້ເຂົ້າເຖິງເດັກທຸກຄົນ ທີ່ເຄີຍຖືກປະປ່ອຍບໍ່ໄດ້ເຂົ້າຮຽນ;

____ ກຸ່ມຜູ້ປົກຄອງ ແລະ ຊຸມຊົນສະເໜີແນວຄວາມຄິດ ແລະ ຊັບພະຍາກອນຕ່າງໆ ກ່ຽວກັບ ການດຳເນີນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການ ຮຽນຮູ້

____ ຜູ້ປົກຄອງໄດ້ຮັບຂໍ້ມູນຂ່າວສານຈາກໂຮງຮຽນ ກ່ຽວກັບການມາໂຮງຮຽນ ແລະ ຜົນການຮຽນ ຂອງລູກຫຼານ;

ລາຍການປະເມີນຕົນເອງຂ້າງເທິງນີ້ຈະຊ່ວຍ ທ່ານ ແລະ ເພື່ອນຂອງທ່ານ ເລີ້ມການວາງ ແຜນ ແລະ ສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ໃນໂຮງຮຽນຂອງທ່ານ. ເຄື່ອງມືຕໍ່ໄປໃນປຶ້ມຄູ່ມືເຫຼັ້ມນີ້ ຈະແນະນຳ ທ່ານ ກ່ຽວກັບວິທີທີ່ຈະເຮັດສິ່ງນີ້,

ສະນັ້ນ, ທ່ານຈົ່ງຢ່າລືມລາຍ ການປະເມີນຕົນເອງນີ້ ຄວນຈົດຈຳໄວ້ອີກວ່າ: ການດຳເນີນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ເປັນຂະບວນວິວັດຕໍ່ເນື່ອງ. ທ່ານເອງ ແລະ ເພື່ອນຂອງທ່ານ , ຜູ້ປົກຄອງ ແລະ ສະມາຊິກຊຸມຊົນຈະຕ້ອງການທົບທວນເບິ່ງລາຍການປະເມີນເປັນບາງເວລາຂອງປີຮຽນ ເພື່ອຕິດຕາມເບິ່ງວ່າ ທ່ານກຳລັງເຄື່ອນໄຫວໄດ້ຕາມອັດຕາທີ່ຍອມຮັບໄດ້ ຫຼື ບໍ່ເພື່ອໃຫ້ໂຮງຮຽນມີສະພາບ ແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

II. ວິທີສ້າງ ແລະ ຮັກສາການປ່ຽນແປງໃຫ້ຍືນຍົງ

ລາຍການຕ່າງໆຂ້າງລຸ່ມນີ້ ມີຄວາມຈຳເປັນທີ່ຈະພາໄປສູ່ຄວາມຍືນຍົງຂອງການປ່ຽນແປງໃນໂຮງຮຽນ. ມີຂັ້ນຕອນໃດແດ່ ທີ່ຂຽນຢູ່ຂ້າງລຸ່ມສອດຄ່ອງກັບສິ່ງທີ່ທ່ານໄດ້ຂຽນລົງໃນເຈ້ຍຂອງທ່ານ? ມີຂັ້ນຕອນໃດແດ່ທີ່ແຕກຕ່າງກັນ? ໃຫ້ສົນທະນາກັນວ່າ ເປັນຫຍັງຈຶ່ງແຕກຕ່າງກັນກັບເພື່ອນຂອງທ່ານ ແລະ ຈະສາມາດສິ່ງເສີມໃຫ້ເກີດຂຶ້ນໃນໂຮງຮຽນຂອງທ່ານໄດ້ຢ່າງໃດ.

1. ການນຳພາ.

ເພື່ອການປ່ຽນແປງເປັນສິ່ງສຳຄັນ; ປາສະຈາກການນຳພາຈະບໍ່ມີການປ່ຽນແປງເກີດຂຶ້ນ. ບັນດາຜູ້ນຳພາ ເຊັ່ນ: ຜູ້ອຳນວຍການໂຮງຮຽນ, ຄູອາວຸໂສ ຫຼື ຄູຜູ້ທີ່ມີຄວາມສົນໃຈທີ່ສຸດ ແລະ ມີພັນທະທີ່ສຸດຕໍ່ການປ່ຽນແປງຈຳເປັນຕ້ອງເປັນ “ຜູ້ກະທຳໃຫ້ເກີດການປ່ຽນແປງ”, ພວກເຂົາຄືຜູ້ທີ່ຮັບຜິດຊອບຕໍ່ອົງການຈັດຕັ້ງ, ການນິເທດຕິດຕາມ ແລະ ເປັນຜູ້ນຳໜ້າພາທາງ. ນອກຈາກນັ້ນ ກໍຍັງປະກອບມີຜູ້ນຳຊຸມຊົນຕ່າງໆ ເຊັ່ນ: ຄະນະພັດທະນາການສຶກສາຂັ້ນເມືອງ (ຄພສມ) ແລະ ຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ເຊິ່ງຄະນະດັ່ງກ່າວເປັນພາກສ່ວນທີ່ສຳຄັນທີ່ສຸດໃນການສະໜັບສະໜູນ ແລະ ສິ່ງເສີມເດັກທຸກຄົນໃຫ້ໄດ້ເຂົ້າຮຽນ ແລະມີປະສິດທິຜົນດີຂຶ້ນ.

2. ການເຝິກອົບຮົມ ແລະ ໂອກາດການໄດ້ຮຽນຮູ້.

ສຳລັບຄູທີ່ອີງໃສ່ການມີສ່ວນຮ່ວມ ແລະ ການຈັດກິດຈະກຳແມ່ນມີຄວາມຈຳເປັນ ເພື່ອແນະນຳ ແລະ ສ້າງຄວາມຍືນຍົງໃນການປ່ຽນແປງ. ຕົວຢ່າງ: ເລີ້ມຕົ້ນດ້ວຍການກຳນົດວັນພັດທະນາພະນັກງານ - ຄູ ເຊິ່ງຈະເປັນວັນທີ່ຄູຈະໄດ້ປະສົບພົບເຫັນການສິດສອນແບບເອົາເດັກເປັນໃຈກາງ. ໃຫ້ໂອກາດ ພວກເຂົາໄດ້ສົນທະນາອະພິປາຍຄຳຖາມ ແລະ ຂໍ້ຂ້ອງໃຈຕ່າງໆ ຢ່າງເປີດເຜີຍກ່ຽວກັບສະພາບແວດລ້ອມທີ່ມີລັກສະນະຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຊຸກຍູ້ສິ່ງເສີມຄູໃຫ້ສັງເກດການສອນເຊິ່ງກັນ ແລະ ກັນ ແລະ ໃຫ້ການສ່ອງແສງ

ຄືນຢ່າງສ້າງສັນ. ເມື່ອມີເດັກທີ່ມີຄວາມຕ້ອງການແຕກຕ່າງກັນ ເຂົ້າຮຽນໃນໂຮງຮຽນ, ໃຫ້ຈັດ ຝຶກອົບຮົມ ເພີ້ມເຕີມເພື່ອທີ່ຈະຊ່ວຍໃຫ້ຄູ:

(ກ) ເຂົ້າໃຈວິທີຮຽນຮູ້ຂອງເດັກເຫຼົ່ານີ້;
(ຂ) ຮຽນຮູ້ວິທີສິດສອນແບບໃໝ່;
(ຄ) ກຳນົດ/ລະບຸການປ່ຽນແປງພາຍໃນໂຮງຮຽນເພື່ອຊ່ວຍເຫຼືອເດັກເຫຼົ່ານີ້ຮຽນຮູ້.

ທ່ານຕ້ອງໄດ້ຕິດຕາມ ຜົນຂອງການປະຊຸມເຝິກອົບຮົມໄດ້ມີຜົນດີຊ່ວຍຄູ ຫຼື ບໍ່, ມີຂົງເຂດໃດ ທີ່ຈຳເປັນຕ້ອງໃຫ້ການຊ່ວຍເຫຼືອເພີ້ມເຕີມ ເພື່ອສົ່ງເສີມການປ່ຽນແປງທາງດ້ານການສອນ-ການຮຽນ ແລະ ຄວນມີກອງປະຊຸມເຝິກອົບຮົມອັນໃດທີ່ຈະຈັດໃນອະນາຄົດ.

3. ການປັບປຸງການສອນ ແລະ ການຮຽນໃນຫ້ອງຮຽນ

ແມ່ນຈຸດເລັ່ງຂອງການປ່ຽນແປງ ໃນການທີ່ຈະເຮັດໃຫ້ເປັນ ສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ກຳໝາຍຄວາມວ່າແມ່ນພາຍໃນໂຮງຮຽນ ກໍຄືຫ້ອງຮຽນ ນັ້ນເອງ ເຊິ່ງວ່າໂຮງຮຽນເປັນຕົວແທນສະພາບແວດລ້ອມທັງໝົດນັ້ນ, ທ່ານ ແລະ ຫ້ອງຮຽນ ຂອງທ່ານກໍຈະເປັນ ສິ່ງທີ່ໃກ້ຊິດຕິດພັນທີ່ສຸດກັບເດັກ ເພາະທ່ານເອງໄດ້ເຫັນພວກເຂົາຕະ ຫຼອດເວລາ, ເຮັດວຽກກັບເຂົາເຈົ້າໃຫ້ໃກ້ຊິດທີ່ສຸດ ແລະ ວິທີການສິດສອນຂອງຄູກໍຈະມີຜົນ ກະທົບທີ່ຍິ່ງໃຫຍ່ຕໍ່ການຮຽນຮູ້ຂອງເດັກ.

4. ການຕິດຕໍ່ສື່ສານລະຫວ່າງໂຮງຮຽນ ແລະ ຊຸມຊົນ

ຂໍ້ມູນຂ່າວສານທີ່ເກັບຈາກໂຮງຮຽນ ແລະ ຊຸມຊົນ ລວມທັງ ຂໍ້ມູນກ່ຽວກັບສະພາບແວດລ້ອມ ແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຈຳເປັນຕ້ອງໃຊ້ເພື່ອບໍລິຫານຈັດການ ແລະ ໃຊ້ໃນ ການຕັດສິນໃຈທີ່ຖືກຕ້ອງ.

5. ຊັບພະຍາກອນຕ່າງໆ

ຈຳເປັນຕ້ອງໄດ້ປຸກລະດົມ ແລະ ນຳໃຊ້ຢ່າງມີປະສິດທິຜົນ. ຄອບຄົວ ແລະ ຊຸມຊົນສາມາດ ມີຄວາມສຳຄັນເປັນພິເສດ (ເຊິ່ງພວກເຮົາຈະໄດ້ຮຽນຮູ້ໃນ ພາກທີ III) ກ່ຽວກັບການເຮັດວຽກ ຮ່ວມກັບຄອບຄົວ ແລະ ຊຸມຊົນເພື່ອທີ່ຈະສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນ ເພື່ອນມິດໃນ ການຮຽນຮູ້.

6. ການວາງແຜນ

ການວາງແຜນທີ່ຍືດຢຸ່ນ ແລະ ເປັນໄລຍະຍາວ (3-5ປີ) ສາມາດໃຊ້ເປັນແນວທາງ ເພື່ອການປ່ຽນແປງເທື່ອລະກ້າວ. ແຜນຄວນຈະເຮັດໃຫ້ຄູ/ພະນັກງານ ແລະ ຊຸມຊົນມີເວລາ ເພື່ອປັບປ່ຽນຈາກ ຄວາມເຊື່ອ ແລະ ການປະຕິບັດຈາກອັນເກົ່າໄປສູ່ອັນໃໝ່. ຄູ ແລະ ພໍ່ແມ່ຜູ້ປົກຄອງ ເດັກຄວນເຂົ້າຮ່ວມໃນການ ຕັ້ງຈຸດປະສົງເປົ້າໝາຍຕ່າງໆ. ຖ້າຫາກມີສ່ວນຮ່ວມຂອງທຸກຄົນ ໃນຕອນຕົ້ນຫຼາຍສໍ່າ ໃດກໍຈະຍິ່ງເປັນການດີຫຼາຍສໍ່ານັ້ນ.

7. ການຮຽນແບບຮ່ວມມື ແລະ ເປັນຄະນະ

ຕໍ່ຂະບວນການປ່ຽນແປງທີ່ດໍາເນີນການຢູ່ນັ້ນ ແມ່ນມີຄວາມຈໍາເປັນ “ແຕ່ລະຄົນມີສ່ວນຮ່ວມ; ແຕ່ລະຄົນເປັນຜູ້ຮຽນຮູ້; ແຕ່ລະຄົນເປັນຜູ້ຊະນະ.” ທັດສະນະຄະຕິແບບນີ້ຈະຫລໍ່ລ້ຽງຫົວຄິດ ປະດິດສ້າງ, ຄວາມໝັ້ນໃຈ ແລະ ມັນຈະສົ່ງເສີມການແລກປ່ຽນໃນໜ້າທີ່ ແລະ ຄວາມຮັບຜິດຊອບຮ່ວມ ກັນ.

8. ພາລະກິດ, ວິໄສທັດ ແລະ ວັດທະນະທໍາຂອງໂຮງຮຽນ

ຈໍາເປັນຕ້ອງໄດ້ຮັບການພັດທະນາປັ່ນອ້ອມຄຸນລັກສະນະຕ່າງໆທີ່ສໍາຄັນຂອງສະພາບແວດລ້ອມແບບຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້ ຄືດັ່ງໄດ້ກ່າວຢູ່ໃນເຄື່ອງມືຂໍ້ທໍາອິດ ໃນປຶ້ມຄູ່ມືເຫຼັ້ມນີ້. ແຕ່ລະຄົນ - ຄູ, ຜູ້ບໍລິຫານ, ເດັກ, ຜູ້ປົກຄອງ ແລະ ຜູ້ນໍາຊຸມຊົນຄວນມີສ່ວນຮ່ວມ ໃນການພັດທະນາພາລະກິດ ແລະ ວິໄສທັດຂອງໂຮງຮຽນ.

9. ການຕິດຕໍ່ສື່ສານທີ່ພວມດໍາເນີນຢູ່.

ໃນນີ້ການເກັບກໍາຂໍ້ມູນຈາກຜູ້ປົກຄອງ ແລະ ຜູ້ນໍາຊຸມຊົນແມ່ນຈໍາເປັນ ເພື່ອຈະໄດ້ຮັບຄວາມເຊື່ອໝັ້ນຈາກເຂົາເຈົ້າ ເພື່ອຈະໃຫ້ແນ່ໃຈວ່າເດັກທຸກຄົນໄດ້ເຂົ້າໂຮງຮຽນ ແລະ ຮຽນຮູ້ຢ່າງເຕັມຄວາມສາມາດທີ່ເຂົາມີ, ກໍຄືເພື່ອເພີ້ມທະວີຄວາມຮູ້ສຶກເປັນເຈົ້າຂອງຂອງຊຸມຊົນ ແລະ ການແລກປ່ຽນຊັບພະຍາກອນ ລະຫວ່າງຊຸມຊົນ ແລະ ໂຮງຮຽນ.


ຄໍາຖາມ:

1. **ນອກຈາກແບບຟອມການປະເມີນຜົນທີ່ກໍານົດໄວ້ໃນບົດຮຽນນີ້ທ່ານຍັງມີສິ່ງໃດທີ່ເຫັນວ່າຄວນເພີ່ມເຕີມ ?**
2. **ວິທີສ້າງແລະຮັກສາການປ່ຽນແປງໃນໂຮງຮຽນໃຫ້ຍືນຍົງຄວນເຮັດຫຍັງແດ່ ?**

ບົດທີ 3 : ຂັ້ນຕອນເພື່ອຈະກາຍເປັນໂຮງຮຽນ ທີ່ມີສະພາບແວດລ້ອມເປັນ ການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

I. ວິທີວາງແຜນ ເພື່ອຈະກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ຫຼັງຈາກທີ່ໄດ້ປະເມີນວ່າໂຮງຮຽນຂອງທ່ານພວມເດີນທາງຮອດບ່ອນໃດແລ້ວ ເພື່ອຈະກາຍ ເປັນໂຮງຮຽນ ທີ່ມີສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແລະ ໄດ້ ຮັບຮູ້ວ່າ ຂະບວນການປ່ຽນແປງເກີດຂຶ້ນຄືແນວໃດແລ້ວ, ທ່ານຈະຕ້ອງການຕັດສິນໃຈວ່າຈະເລີ້ມ ດ້ວຍຂັ້ນຕອນອັນໃດໃນຂັ້ນຕໍ່ໄປ ເພື່ອຈະສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນ ມິດໃນການຮຽນຮູ້, ຈະເປັນພຽງໜຶ່ງຫ້ອງຮຽນ ຫຼື ທັງໝົດໂຮງຮຽນ. ຂ້າງລຸ່ມນີ້ຈະເປັນຂໍ້ແນະນຳຂັ້ນ ຕອນຕ່າງໆ ເພື່ອວາງແຜນແລະປະຕິບັດການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະເປັນເພື່ອນ ມິດໃນການຮຽນຮູ້. ບັນດາໜ້າວຽກທີ່ຈະປະຕິບັດທັງໝົດຄວນເປັນໄປຕາມ 6 ຂັ້ນຕອນດັ່ງລຸ່ມນີ້:



ຂັ້ນຕອນທີ 1: ສ້າງຕັ້ງຄະນະຮັບຜິດຊອບສ້າງສະພາບແວດລ້ອມການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ກຳນົດບຸກຄົນທີ່ຈະມີບົດບາດໃນການວາງແຜນ ແລະ ປະຕິບັດການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແລະ ຕັ້ງກຸ່ມປະສານງານ. ບຸກຄົນເຫຼົ່ານີ້ຈະຈັດຕັ້ງຄະນະ ຮັບຜິດຊອບ ສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຄະນະຮັບຜິດຊອບອາດຈະປະກອບດ້ວຍຄູ 3-4 ທ່ານ, ຜູ້ອຳນວຍການໂຮງຮຽນ ແລະ ຜູ້ປົກຄອງ 2-3 ທ່ານ ຫຼື ອາດຈະເປັນຄະນະໃຫຍ່ກວ່ານີ້ກໍໄດ້. ກຸ່ມປະສານງານອາດປະກອບດ້ວຍ ຄູ, ຜູ້ບໍລິຫານ ແລະ ຜູ້ອື່ນໆ ໃນໂຮງຮຽນ; ນັກການສຶກສາ ແລະ ຜູ້ບໍລິການສຸຂະພາບ; ບຸກຄົນຈາກກຸ່ມດ້ອຍຕ່າງໆ; ຄົນພິການ; ນັກຮຽນຫ້ອງໃຫຍ່; ຜູ້ປົກຄອງ; ສະມາຊິກຊຸມຊົນ ແລະ ອົງການຈັດຕັ້ງທ້ອງຖິ່ນ.

ຂັ້ນຕອນທີ 2: ລະບຸຄວາມຕ້ອງການ.

ກ. ຄົນສ່ວນຫຼາຍໄດ້ຮູ້ຫຍັງມາແດ່ແລ້ວ ແລະ ສິ່ງໃດແດ່ທີ່ພວກເຂົາຈຳເປັນຕ້ອງໄດ້ຮຽນຮູ້ອີກ ?

1) ການສຳຫຼວດຄວາມຮູ້ຂອງກຸ່ມປະສານງານ. ບັນດາສະມາຊິກໃນຄະນະຮັບ ຜິດຊອບສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ໄດ້ຮູ້ຫຍັງແດ່ແລ້ວກ່ຽວກັບຄຸນລັກສະນະ ແລະ ຜົນປະໂຫຍດຂອງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້? ທ່ານ ແລະ ພວກເຂົາເຫຼົ່ານີ້ຈຳເປັນຕ້ອງໄດ້ຮຽນຮູ້ຫຍັງແດ່ ແລະ ແຕ່ລະຄົນຈະຮຽນຮູ້ໄດ້ແນວໃດ?

   ຕົວຢ່າງ: ເຊີນແຂກມາ ປາຖະກະຖາໃຫ້ຄວາມຮູ້, ພົບປະກັບ ວິທະຍາກອນທີ່ຈະໃຫ້ຄວາມຮູ້ ແລະ ສູນ ຊັບພະຍາກອນ ຕ່າງໆ.

2) ສຳຫຼວດຄວາມຮູ້ຂອງນັກຮຽນ, ພະນັກງານ/ຄູ, ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ. ເມື່ອກຸ່ມປະສານງານມີຄວາມຮູ້ ກ່ຽວກັບການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ແລ້ວ, ໃຫ້ຕັດສິນໃຈວ່າຈະຖາມຜູ້ອື່ນໆມີຫຍັງແດ່ ? ສິ່ງນີ້ອາດຈະກ່ຽວຂ້ອງກັບການສຳພາດສ່ວນບຸກຄົນແບບງ່າຍໆ ຫຼື ສົນທະນາເປັນກຸ່ມ ຫຼື ທ່ານອາດຈະອອກແບບສອບຖາມສັ້ນໆກໍໄດ້.

ຂ. ຮຽນຮູ້ກ່ຽວກັບໂຮງຮຽນ ແລະ ເດັກໃນຊຸມຊົນ

1) ທົບທວນ (ຫຼື ເຮັດໃຫ້ແລ້ວ) ແບບສອບຖາມປະເມີນຕົນເອງ ກ່ຽວກັບສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ທີ່ບັນຈຸຢູ່ໃນຕອນຕົ້ນຂອງເຄື່ອງມືນີ້ກ່ຽວກັບ “ດຽວນີ້, ພວກເຮົາ ພວມຢູ່ຈຸດໃດ”. ເຮັດເປັນລາຍການສິ່ງທີ່ໂຮງຮຽນຂອງທ່ານພວມເຮັດຢູ່ແລ້ວ

ແລະ ສິ່ງທີ່ຈຳເປັນຕ້ອງ ເຮັດ ເພື່ອໃຫ້ປ່ຽນເປັນ ສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນ ເພື່ອນມິດໃນການຮຽນຮູ້.

2) ຊອກເບິ່ງວ່າຍັງມີເດັກຄົນໃດ ທີ່ຍັງບໍ່ມາເຂົ້າໂຮງຮຽນ. “ການນຳເອົາເດັກທຸກຄົນ ເຂົ້າໂຮງຮຽນ ແລະ ຮຽນຮູ້”.

3) ກຳນົດຄວາມຈຳເປັນທາງການສຶກສາຂອງນັກຮຽນ ແລະ ບັນດາເດັກທີ່ເຄີຍຖືກປ່ອຍປະໃນຊຸມ ຊົນຂອງທ່ານ. ຄະນະຮັບຜິດຊອບຈຳເປັນຕ້ອງເຂົ້າໃຈ ຄວາມຕ້ອງການເຫຼົ່ານີ້ຢ່າງເຖິງຖອງເທົ່າ ທີ່ຈະເປັນໄປໄດ້ ເພື່ອທີ່ຈະສ້າງແຜນທີ່ດີຂອງຫ້ອງຮຽນ ແລະ ໂຮງຮຽນສຳລັບທີ່ຈະບັນຈຸເອົາເດັກ ເຫຼົ່ານີ້ເຂົ້າຮຽນ. ຄະນະ ຮັບຜິດຊອບອາດຈະຕ້ອງເຮັດການປະເມີນຄວາມຕ້ອງການ.

- ຖ້າຫາກການຮຽນຂອງນັກຮຽນຍັງເຮັດບໍ່ທັນສຳເລັດຜົນເທື່ອ. ພໍ່ແມ່ຜູ້ປົກຄອງສາມາດໃຫ້ຂໍ້ມູນ ທີ່ເປັນ ປະໂຫຍດ ກ່ຽວກັບລູກຫຼານຂອງເຂົາແກ່ຄະນະຮັບຜິດຊອບ.

4) ກຳນົດ ຊັບພະຍາກອນທີ່ມີຢູ່ໃນໂຮງຮຽນ ແລະ ຊຸມຊົນຂອງທ່ານ. ລາຍລາຍການການສະໜັບ ສະໜູນ ແລະ ການບໍລິການທີ່ຮຽກຮ້ອງຕ້ອງການ ສຳລັບເດັກທີ່ມີພື້ນຖານ ແລະ ຄວາມສາມາດ ແຕກຕ່າງກັນ. ສິ່ງເຫຼົ່ານີ້ອາດລວມເອົາການບໍລິການຂອງລັດ, ອົງກອນທີ່ບໍ່ສັງກັດລັດ, ຄຼີນິກສຸຂະ ພາບ ແລະ ພາກສ່ວນເອກະຊົນຕ່າງໆ.

5) ພັນລະນາ/ບັນຍາຍເຖິງແຜນງານການສຶກສາໃນປະຈຸບັນ ແລະ ສະພາບແວດລ້ອມຂອງໂຮງຮຽນ. ການບັນຍາຍນີ້ ຄວນຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ມີອາຄານສະຖານທີ່, ເຟີນີເຈີ ແລະ ວັດຖຸອຸປະ ກອນຕ່າງໆ ອັນໃດແດ່ທີ່ສະໜອງໃຫ້ ແລະ ໄດ້ນຳໃຊ້ຢູ່ໃນປະຈຸບັນ. ເດັກທຸກຄົນສາມາດເຂົ້າ ເຖິງສິ່ງເຫຼົ່ານີ້ໄດ້ບໍ? ຖ້າບໍ່, ຈະເຮັດແນວໃດເພື່ອຈະໃຫ້ເຂົ້າເຖິງໄດ້?

6) ກຳນົດ ແລະ ພັນລະນາເຖິງຂະບວນການສອນ-ການຮຽນໃນຫ້ອງຮຽນ. ຢ້ຽມຢາມຫ້ອງຮຽນ ແລະ ພັນລະນາຢ່າງລະອຽດຕາມທີ່ເຮົາໄດ້ເຫັນ ກ່ຽວກັບສິ່ງທີ່ຄູ ແລະ ນັກຮຽນໄດ້ເຮັດ. ຫ້ອງຮຽນເຫຼົ່ານີ້ມີລັກສະນະການຮຽນຮ່ວມ ແລະ ເປັນມິດຕໍ່ການຮຽນຮູ້ບໍ ? ຍ້ອນຫຍັງຈຶ່ງວ່າມັນມີ ແລະ ຍ້ອນຫຍັງຈຶ່ງວ່າມັນບໍ່ມີ? ໃຫ້ວິເຄາະຂໍ້ມູນເຫຼົ່ານີ້. ໃຫ້ບັນຍາຍເຖິງການປ່ຽນແປງທີ່ຈຳເປັນ ຕ້ອງເຮັດ ເພື່ອສ້າງຫ້ອງຮຽນ ທີ່ມີລັກສະນະຮຽນຮ່ວມ ແລະ ເປັນມິດຕໍ່ການຮຽນຮູ້. ໃຫ້ພິຈາລະ ນາຂະໜາດຂອງຫ້ອງຮຽນ, ຍຸດທະ ສາດການສອນ, ຮູບແບບການສອນ, ການພົວພັນລະຫວ່າງ ຄູ-ນັກຮຽນ, ແລະ ສື່ອຸປະກອນທີ່ໃຊ້. ໃຫ້ ເກັບຂໍ້ມູນຕື່ມອີກ, ຂໍ້ມູນທີ່ທ່ານລວບລວມໄດ້ນັ້ນອາດກໍ່ ໃຫ້ເກີດບັນຫາໃໝ່ ຫຼື ບັນຫາເພີ້ມເຕີມຂຶ້ນມາ. ໃຫ້ລວບລວມເອົາຂໍ້ມູນເພີ້ມເຕີມ ເພື່ອທ່ານຈະສາ ມາດເຮັດການຕັດສິນໃຈ ໂດຍອີງໃສ່ຂໍ້ມູນທີ່ກ່ຽວຂ້ອງທັງໝົດ, ບໍ່ໃຫ້ອີງໃສ່ຄຳຄິດຄຳເຫັນ ຫຼື ແນວຄິດຕ່າງໆ.

ຂັ້ນຕອນທີ 3 : ສ້າງວິໄສທັດ

ໃຫ້ບັນຍາຍເຖິງສະພາບແວດລ້ອມຂອງຫ້ອງຮຽນທີ່ທ່ານປາຖະໜາ ຫຼື ຫ້ອງຮຽນໃນຝັນ(ອຸດົມການ) ຂອງ ທ່ານກໍໄດ້. ເມື່ອຕົວທ່ານເອງ ແລະ ເດັກນັກຮຽນຍ່າງເຂົ້າໄປພາຍໃນຫ້ອງຮຽນ, ໃຫ້ນຶກພາບເບິ່ງ ວ່າມັນຄວນຈະເປັນແນວໃດ? ມັນໜ້າຈະມີການຕົບແຕ່ງຫຍັງແດ່? ຄູຄວນຈະເຮັດຫຍັງແດ່? ນັກຮຽນ ຄວນຈະເຮັດຫຍັງແດ່? ຝາຫ້ອງຄວນຈະເປັນແນວໃດ? ໃຫ້ພິຈາລະນາກ່ຽວກັບເດັກຍິງ ແລະ ເດັກ ຊາຍ; ເດັກທີ່ບໍ່ ເວົ້າພາສາທີ່ຄົນສ່ວນຫຼາຍເວົ້າກັນ; ເດັກທີ່ມີບັນຫາທາງດ້ານຫູ, ສາຍຕາ ຫຼື ສະຕິ ປັນຍາ; ເດັກທີ່ມີພື້ນຖານທາງດ້ານສາສະໜາ ແລະ ສະຖານະພາບທາງດ້ານເສດຖະກິດສັງຄົມ ທີ່ແຕກຕ່າງກັນ. ຖ້າເດັກໃນເກນອາຍຸຮຽນໃນຊຸມຊົນໄດ້ເຂົ້າໂຮງຮຽນໝົດ, ຄວາມຕ້ອງການທາງ ການຮຽນຮູ້ທີ່ແຕກຕ່າງກັນ ຈະມີຄວາມໝາຍແນວໃດ ແລະ ຈະຕອບສະໜອງຄວາມຕ້ອງ ການເຫຼົ່ານີ້ ໄດ້ຢ່າງໃດ? ໃຫ້ທ່ານຂຽນວິໄສທັດຂອງ “ຫ້ອງຮຽນໃນຝັນ” ຂອງທ່ານໃຫ້ຖືກກັບຄວາມຕ້ອງການ ເທົ່າທີ່ສາມາດຈະເປັນໄປໄດ້ເຊິ່ງມັນເປັນ ເປົ້າໝາຍຮັບໃຊ້ໃນການສ້າງສະພາບແວດລ້ອມແບບຮຽນ ຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ຂັ້ນຕອນທີ 4: ການສ້າງແຜນພັດທະນາ

ໃຫ້ເຮັດຕາຕະລາງເວລາປະຕິບັດກິດຈະກຳຕ່າງໆ ເພື່ອສ້າງ ແລະ ດຳເນີນການສ້າງສະພາບ ແວດ ລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ທ່ານຈະຕ້ອງບອກລາຍລະອຽດ ກ່ຽວກັບການປ່ຽນແປງຕ່າງໆທີ່ຕ້ອງການ ແລະ ເວລາທີ່ຈະດຳເນີນການ. ພ້ອມກັນນັ້ນທ່ານກໍຄວນ ຈະລົງບັນຊີສິ່ງ/ອຸປະກອນ ແລະ ການບໍລິການຕ່າງໆ, ຄົນຮັບຜິດຊອບເພື່ອສະໜອງການບໍລິການ ເຫຼົ່ານີ້ ແລະ ບັນດາຊັບພະຍາກອນອື່ນໆ ທີ່ຈຳເປັນຕື່ມອີກ. ຕາຕະລາງຂອງທ່ານຄວນປະກອບມີວັນ-ເວລາທີ່ເປັນຈິງ ເພື່ອປະຕິບັດການປ່ຽນແປງໃຫ້ເກີດຂຶ້ນ. ມັນຄວນຈະມີເປົ້າໝາຍທີ່ແນ່ນອນ, ແຕ່ກໍ ຄວນມີຄວາມຢືດຢຸ່ນ ເພື່ອຕອບຮັບກັບ ຄວາມຈຳເປັນ ແລະເງື່ອນໄຂຂອງການປ່ຽນແປງ.

ໃຫ້ຈັດຫາຊັບພະຍາກອນເພີ້ມເຕີມເມື່ອເວລາຈຳເປັນ.ໃຫ້ກຽມໄວ້ລ່ວງໜ້າເພື່ອທີ່ຈະເພີ້ມຊັບ ພະຍາກອນທີ່ຈຳເປັນ (ເຊັ່ນ: ການຂຶ້ນງົບປະມານສຳລັບສື່ການສອນ, ການພັດທະນາລະບົບເພື່ອນ ສອນເພື່ອນ ຫຼື ການສ້າງຕັ້ງຄະນະກຳມະການ ຜູ້ປົກຄອງ-ຄູ ຂຶ້ນເປັນພິເສດ ເພື່ອການພັດທະນາ ຊັບພະຍາກອນ).

ໃຫ້ພິຈາລະນາເຖິງແນວຄິດຈິດໃຈ. ການພັດທະນາການສຶກສາ ເພື່ອທີ່ຈະໃຫ້ມັນຊຸກຍູ້ການ ຮຽນ ແລະ ການມີສ່ວນຮ່ວມຂອງນັກຮຽນທຸກຄົນໃຫ້ເກີດຂຶ້ນໃນ 2 ແນວທາງ: ໂດຍຜ່ານການວິເຄາະ ລະອຽດ ແລະ ວາງແຜນໂດຍຜ່ານການປ່ຽນແປງໃນແນວຄິດຈິດໃຈຂອງຄົນ. ທ່ານອາດຈະໃຊ້ແບບ ຟອມປະເມີນຕົນເອງ ກ່ຽວກັບສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ແລະ ຄູ່ມືເຫຼົ່ານີ້ ເພື່ອເຮັດການວິເຄາະລະອຽດ. ທ່ານຈະຕ້ອງເຮັດຫຍັງແດ່ ເພື່ອພະຍາຍາມໃຫ້ເກີດມີການປ່ຽນແປງໃນແນວຄິດຈິດໃຈຂອງຄົນ? ຍົກຕົວຢ່າງ: ລອງເລີ້ມຕົ້ນດ້ວຍການເພີ້ມທະວີການມີສ່ວນຮ່ວມຂອງພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນຢູ່ໃນຫ້ອງຮຽນຂອງທ່ານ. ດ້ວຍວິທີນີ້, ພວກເຂົາຈະສາມາດຮຽນຮູ້ ເພື່ອຕົນເອງ ກ່ຽວກັບຜົນປະໂຫຍດຂອງການມີສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແລະ ເຂົາຈະສາມາດຊ່ວຍທ່ານໄດ້ຫຼາຍຂຶ້ນ ໃນການສິດສອນ ແລະ ການຮຽນຮູ້ຂອງນັກຮຽນ.

ຂັ້ນຕອນທີ 5: ດຳເນີນປະຕິບັດຕາມແຜນທີ່ວາງໄວ້

ຖ້າຈຳເປັນກໍຄວນສະໜອງຄວາມຊ່ວຍເຫຼືອດ້ານວິຊາການແກ່ພະນັກງານ-ຄູ. ການຊ່ວຍເຫຼືອດ້ານ ວິຊາການມີຄວາມຈຳເປັນ ຫຼື ບໍ່ ເຊັ່ນ: ການຈັດເຝິກອົບຮົມກ່ຽວກັບຫົວຂໍ້ໃດໜຶ່ງ ໂດຍບຸກຄົນຜູ້ທີ່ມີປະສົບການມາແລ້ວ? ຖ້າເປັນເຊັ່ນນັ້ນ, ຮູບແບບໃດຂອງຄວາມຊ່ວຍເຫຼືອ ທີ່ມີຄວາມຈຳເປັນ ແລະ ໃຜຈະເປັນຜູ້ສະໜອງໃຫ້ ? ຈະມີການດຳເນີນການຄືແນວໃດ ແລະ ຈະຈັດໃຫ້ຈັກເທື່ອ ? ເຝິກອົບຮົມໃຫ້ພະນັກງານ-ຄູ (ທັງຜູ້ສອນ ແລະ ຜູ້ບໍ່ໄດ້ສອນ) ແລະ ນັກຮຽນຕາມຄວາມຈຳເປັນ. ຫົວຂໍ້ເຝິກອົບຮົມຄວນກວມເອົາສິດທິ ເດັກ ແລະ ການນຳໃຊ້ເຂົ້າໃນການສຶກສາ, ຄວາມບໍ່ສະເໝີພາບ ແລະ ສະເໝີພາບຂອງບົດບາດຍິງ-ຊາຍ, ຄວາມແຕກຕ່າງ ແລະ ຄວາມຄ້າຍຄືກັນທາງດ້ານວັດທະນະທຳ ແລະ ພາສາ, ຄວາມຮັບຮູ້ກ່ຽວກັບຄວາມ ພິການ, ການແນະນຳການດູແລເບິ່ງແຍງພິເສດ, ໃຫ້ຄວາມກະຈ່າງແຈ້ງກ່ຽວກັບຄວາມຮັບຜິດຊອບຂອງແຕ່ລະບຸກຄົນ, ຍຸດທະສາດການສິດສອນແບບຮ່ວມມື ແລະ ອື່ນໆ. ສິ່ງເສີມການມີສ່ວນຮ່ວມຢ່າງຕັ້ງໜ້າຂອງພໍ່ແມ່ຜູ້ປົກຄອງ. ຄະນະວາງແຜນຄວນພັດທະນາລະບົບ ສຳລັບການສື່ສານຂອງຜູ້ປົກຄອງ, ຄູ. ຜູ້ໃດຈະ ເປັນຜູ້ຮັບຜິດຊອບການສື່ສານຢ່າງເປັນປົກກະຕິກັບພໍ່ແມ່ຜູ້ປົກຄອງ? ການປະກອບສ່ວນຂອງພໍ່ແມ່ຜູ້ປົກຄອງ ຄວນໄດ້ຮັບການກະຕຸກຊຸກຍູ້ ແລະ ໄດ້ຮັບການພິຈາລະນາຢ່າງຈິງຈັງຕະຫຼອດຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດ. ວາງແຜນວິທີທີ່ຈະແກ້ບັນຫາກັບການຕໍ່ຕ້ານ. ທີ່ໂຮງຮຽນ (“ມ”), ຜູ້ອຳນວຍການໂຮງຮຽນອະນຸຍາດໃຫ້ຄູປ່ຽນແປງໄປຕາມຈັງຫວະຄວາມໄວທີ່ເຂົາຈະສະດວກໃນການປະຕິບັດ. ຄູສ່ວນໃຫຍ່ ໄດ້ນຳໃຊ້ການສອນແບບເອົາຜູ້ຮຽນເປັນໃຈກາງຢ່າງວ່ອງໄວ, ແຕ່ຄູບາງຄົນກໍບໍ່ສາມາດເຮັດໄດ້ຄືແນວນັ້ນ. ພໍ່ແມ່ຜູ້ປົກຄອງສ່ວນໃຫຍ່ ໄດ້ໃຫ້ການສະໜັບສະໜູນການຕັດສິນໃຈຂອງໂຮງຮຽນເພື່ອສ້າງໂຮງຮຽນທີ່ມີລັກສະນະຮຽນຮ່ວມຫຼາຍຂຶ້ນ, ແຕ່ຜູ້ປົກຄອງບາງຄົນກໍຍັງກັງວົນກັບຈຳນວນເດັກພິການ ທີ່ຈະຮັບເຂົ້າມາຮຽນນັ້ນຄວນມີເທົ່າໃດ. ພວກເຂົາບໍ່ຕ້ອງການໃຫ້ໂຮງຮຽນກາຍເປັນທີ່ຮູ້ຈັກກັນວ່າເປັນພຽງ “ໂຮງຮຽນ ສຳລັບ ເດັກພິການ ຫຼື ເດັກທີ່ມີ ຄວາມຕ້ອງການພິເສດ” ໂຮງຮຽນໄດ້ແກ້ໄຂບັນຫານີ້ດ້ວຍການສະເລ່ຍເປັນເປີເຊັນ. ເພື່ອຈະກຳນົດກ່ຽວກັບການຕໍ່ຕ້ານທີ່ເປັນໄປໄດ້ ອາດເກີດຂຶ້ນມີຫຍັງແດ່ ແລະ ວິທີທີ່ຈະເອົາຊະນະມັນ.

ຂັ້ນຕອນທີ 6: ປະເມີນຜົນຈາກການປະຕິບັດ

ໃຫ້ຕິດຕາມຊຸກຍູ້ຄວາມກ້າວໜ້າ ແລະ ດັດແກ້ແຜນຂອງທ່ານເມື່ອຈຳເປັນ. ຄະນະຮັບຜິດຊອບສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ເປັນຊັບພະຍາກອນຕໍ່ເນື່ອງ ທີ່ຈະຖືກໃຊ້ຕະຫຼອດປີຮຽນ. ໃຫ້ກຽມຕາຕະລາງເວລາເພື່ອຈັດກອງປະຊຸມຕິດຕາມ. ຕັດສິນໃຈວິທີຕິດຕາມຊຸກຍູ້ວ່າຈະເຮັດແນວໃດ ແລະ ໃຜຈະເປັນຜູ້ເຮັດ. ໃຫ້ສັງເກດຕິດຕາມເບິ່ງວ່າແຜນໂຄງການພວມດຳເນີນໄປຄືແນວໃດ; ໃຫ້ຕັດສິນໃຈວ່າ ການຊ່ວຍເຫຼືອທີ່ມີຢູ່ເໝາະສົມ ຫຼື ບໍ່ ຫຼື ມີຄວາມຈຳເປັນຕ້ອງປັບປຸງ ຫຼື ລົບລ້າງ.

ຈົ່ງສະຫລອງຜົນສຳເລັດຂອງທ່ານ ! ການບັນລຸການປ່ຽນແປງທີ່ສຳຄັນ ໃນແຜນງານການສຶກສາ ໂດຍສະເພາະໂຕທີ່ໄດ້ກວມເອົາການລົງທຶນດ້ານຊັບພະຍາກອນມະນຸດ ແລະ ວັດຖຸສິ່ງຂອງ ເພາະສະນັ້ນສົມຄວນທີ່ຕ້ອງໄດ້ຮັບການສະເຫລີມສະຫລອງ! ໃນເມື່ອໄດ້ນຳຊຸມຊົນເຂົ້າມາມີສ່ວນຮ່ວມຢ່າງມີຄວາມຫວັງ ໃນແຕ່ລະບາດກ້າວຂອງເສັ້ນທາງ, ໃຫ້ເຊີນຊຸມຊົນຮ່ວມສະຫລອງການປ່ຽນແປງໃນໂຮງຮຽນຂອງ ທ່ານດ້ວຍ ໂດຍການຈັດງານວາງສະແດງ, ງານບຸນ ຫຼື “ວັນເປີດໂຮງຮຽນ” ຢູ່ໃນວັນເປີດຊົມໂຮງຮຽນ, ພໍ່ແມ່ຜູ້ປົກຄອງ, ສະມາຊິກຊຸມຊົນ ແລະ ພະນັກງານຈາກພາກສ່ວນ ຕ່າງໆ ກໍຈະຖືກເຊີນມາໂຮງຮຽນ. ຜົນງານທີ່ເປັນຕົວແທນ ຈາກນັກຮຽນທຸກຄົນຈະຖືກວາງສະແດງ ຄຽງຄູ່ກັບສື່ອຸປະກອນການຮຽນການສອນ; ຄູສະ ແດງ ຫຼື ສາທິດ ທັກສະໃໝ່ໃນການປະເມີນຜົນ ແລະ ການສິດສອນ ລວມທັງ ເດັກທີ່ມີຄວາມສາມາດແຕກຕ່າງກັນທັງໝົດ ກໍສະແດງ ຫຼື ສາທິດ ສິ່ງທີ່ເຂົາໄດ້ຮຽນຮູ້ມາ.

ທັງໝົດທຸກຂັ້ນຕອນທີ່ກ່າວມາຂ້າງເທິງນັ້ນ ແມ່ນມີຄວາມສຳຄັນເປັນຢ່າງຍິ່ງໃນການທີ່ຈະກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມຮຽນຮ່ວມແລະເປັນເພື່ອນມິດໃນການຮຽນຮູ້.

II. ວິທີຕິດຕາມຄວາມກ້າວໜ້າ

ພວກເຮົາໄດ້ສ້າງຄວາມແຕກຕ່າງຫຍັງແດ່? ຫ້ອງຮຽນ ແລະ ໂຮງຮຽນຂອງພວກເຮົາໄດ້ປ່ຽນເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຫຼາຍຂຶ້ນ ຫຼື ບໍ່? ເພື່ອຈະຊອກເບິ່ງວ່າ: ທ່ານປະສົບຜົນ ສຳເລັດໃນການພັດທະນາສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ຫຼືບໍ່ນັ້ນ, ທ່ານຈະຕ້ອງຖາມ 2 ຄຳຖາມສຳຄັນ ຄື:

1. ພວກເຮົາເປັນ “ລັກສະນະຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້” ໃນທິດທາງທີ່ພວກເຮົາຕັ້ງໃຈຢາກຈະເປັນແລ້ວ ຫຼື ບໍ່? (ພວກເຮົາຈະສາມາດປັບປຸງສິ່ງທີ່ ພວກເຮົາໄດ້ເຮັດມາແນວໃດ?)
2. ພວກເຮົາໄດ້ສ້າງຄວາມແຕກຕ່າງອັນໃດແດ່, ໂດຍສະເພາະໃນການປັບປຸງການຮຽນຮູ້ຂອງເດັກ?

ທ່ານສາມາດປະເມີນຂະບວນການ ແລະ ຜົນໄດ້ຮັບຂອງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ແບບເປັນທາງການ ແລະບໍ່ເປັນທາງການ. ທ່ານ ແລະ ຜູ້ອື່ນໆ ພາຍໃນໂຮງຮຽນສາມາດດຳເນີນການປະເມີນຜົນແບບບໍ່ເປັນທາງການໄດ້, ແລ້ວກໍໃຊ້ຂໍ້ມູນທີ່ ທ່ານ ເກັບກຳ ເພື່ອສ້າງເປັນຮູບເປັນຮ່າງ ຫຼື ເຮັດການປ່ຽນແປງໃນແຜນງານໂຄງການ. ນອກຈາກການປະເມີນຜົນແບບບໍ່ເປັນທາງການແລ້ວ, ມັນກໍຈະເປັນການດີທີ່ຈະໃຫ້ມີບຸກຄົນຂ້າງນອກທີ່ເຊື່ອຖືໄດ້ ເຂົ້າມາປະເມີນແບບເປັນທາງການຢ່າງເປັນປົກກະຕິ. ການປະເມີນຜົນນີ້ອາດເປັນພາກສ່ວນໜຶ່ງຂອງການຢັ້ງຢືນເພື່ອໃຫ້ກຽດຕິຍົດໂຮງຮຽນ ຫຼື ເປັນແນວທາງການປະເມີນໂຮງຮຽນໂດຍຜ່ານ “ສາຍຕາສົດໆ”. ຢູ່ທີ່ໂຮງຮຽນ “ມ” ໃນວັນເປີດ ໂຮງຮຽນປະຈຳປີ, ພໍ່ແມ່ຜູ້ປົກຄອງ ຈະຕື່ມແບບສອບຖາມ ເພື່ອປະເມີນອາຄານສະຖານທີ່ໂຮງຮຽນ, ຜົນການດຳເນີນງານ ແລະ ການຮຽນຮູ້ຂອງນັກຮຽນ ລວມທັງ ສະເໜີແນະ ເພື່ອການປັບປຸງດ້ານຕ່າງໆ. ດ້ວຍວິທີນີ້, ພວກເຂົາໄດ້ໃຫ້ຂໍ້ຄິດເຫັນທີ່ດີຫຼາຍຢ່າງ. ເຮົາຄວນຈຳໄວ້ອີກວ່າ ເດັກກໍສາມາດເປັນຜູ້ຕິດຕາມ ແລະ ປະເມີນຜົນທີ່ດີໄດ້ເໝືອນກັນ ເຊິ່ງພວກເຮົາ ກໍຄວນຈະຖາມເຂົາດ້ວຍ ! ແບບຟອມປະເມີນຜົນຕົນເອງຂອງການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ທີ່ໃຫ້ໄວ້ໃນຕອນຕົ້ນຂອງຄູ່ມືເຫຼັ້ມນີ້, ນອກຈາກນີ້ຍັງສາມາດປະເມີນຜົນຈາກແຟ້ມສະສົມຜົນງານທີ່ໂຮງຮຽນ ຫຼື ຫ້ອງຮຽນຂອງທ່ານ ຕາມຮ່າງ ດັ່ງລຸ່ມນີ້ :

	ການສັງເກດ	ການປະຕິບັດການຮຽນຮູ້	ແຟ້ມສະສົມຜົນງານ	ການກວດກາແບບອິນໄລ	ອື່ນໆ
ປະຈຳວັນ					
ປະຈຳອາທິດ					
ປະຈຳພາກ					
ປະຈຳປີ					

ນອກຈາກການໃຊ້ແບບຟອມສອບຖາມແລ້ວ, ຍັງມີອີກ 5 ວິທີ ສຳລັບການລວບລວມຂໍ້ມູນເພື່ອສຳຫຼວດເບິ່ງວ່າໂຮງຮຽນພວມກ້າວໄປສູ່ການສ້າງສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້ ຫຼືບໍ່ :

1. ບັນທຶກປະຈຳວັນ.

ທ່ານແລະເພື່ອນຄູຂອງທ່ານ ສາມາດເຮັດບັນທຶກສັ້ນໆ ໃນແຕ່ລະເດືອນສິ່ງທີ່ທ່ານບັນລຸຜົນ ສຳເລັດໃນການພັດທະນາສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ໃນນີ້ຈະປະກອບມີການບັນທຶກບັນດາກິດຈະກຳຕ່າງໆ ແລະ ກອງປະຊຸມໃນໂຮງຮຽນ ແລະ ຊຸມຊົນ. ຜູ້ຕິດຕາມຫ້ອງຮຽນ ຫຼື ນັກຮຽນ ກໍສາມາດເຮັດບັນທຶກແບບງ່າຍໆໄດ້ເຊັ່ນກັນ

ກ່ຽວກັບ ສິ່ງທີ່ເກີດຂຶ້ນ ແລະ ສາມາດທີ່ຈະນຳມາສົນທະນາອະພິປາຍມັນກັບບັນດາຄູ ແລະ ທັງ ໝົດໂຮງຮຽນ ໃນແຕ່ລະເດືອນ. ຜູ້ນຳຊຸມຊົນ ຫຼື ພໍ່ແມ່ຜູ້ປົກຄອງ ກໍສາມາດທີ່ຈະມາຢ້ຽມຢາມ ໂຮງຮຽນປົກກະຕິ ແລະ ຈົດບັນທຶກໄດ້ເຊັ່ນກັນ.

2 ເວົ້າລົມກັບຜູ້ອື່ນໆ

ກິດຈະກຳນີ້ສ່ວນໃຫຍ່ຈະຖືກປະຕິບັດແບບບໍ່ເປັນທາງການ ໃນຂະນະທີ່ສະພາບແວດ ລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ພັດທະນາຂຶ້ນ, ແຕ່ບາງຄັ້ງທ່ານກໍຈຳ ເປັນຕ້ອງຂຶ້ນ ແຜນຫາໂອກາດພິເສດ ເມື່ອທ່ານຢາກຊອກຫາຄຳຕອບແກ້ບັນຫາ. ທ່ານສາມາດ ເຮັດສິ່ງນີ້ ໂດຍໃຊ້ ຄຳຖາມຕ່າງໆ ແລະບັນທຶກຄຳຕອບໄວ້. ໃຫ້ເວົ້າລົມກັບນັກຮຽນ, ຜູ້ປົກຄອງ ແລະ ຄູຜູ້ອື່ນໆ ຈະເປັນແບບບຸກຄົນ ຫຼື ເປັນກຸ່ມກໍໄດ້. ສິ່ງສຳຄັນສຳລັບທ່ານ ກໍຄື ຕ້ອງຖາມ ຄຳຖາມທີ່ຈະໄດ້ຂໍ້ມູນຂ່າວສານ ແລະ ໄດ້ຄຳຄິດເຫັນແທນທີ່ຈະເປັນຄຳຕອບ ທີ່ຄົນຄິດວ່າ ທ່ານ ຢາກໄດ້.

3 ປະເມີນຄວາມຮູ້ ແລະ ທັກສະໂດຍຜ່ານການຂຽນບົດ.

ຄູຜູ້ອື່ນໆ ແລະ ທ່ານຮູ້ຫຍັງແດ່ ກ່ຽວກັບປະຊາກອນນັກຮຽນທີ່ຫຼາກຫຼາຍ ໃນໂຮງຮຽນ. ທ່ານອາດຈະຂໍໃຫ້ຄູຜູ້ອື່ນໆ ຂຽນບົດກ່ຽວກັບສິ່ງທີ່ເຂົາຮູ້ແລ້ວ ຂຽນບັນດາຄຳຖາມກ່ຽວກັບສິ່ງທີ່ ພວກເຂົາຄິດວ່າຍັງຢາກຈະຮູ້. ສິ່ງນີ້ຍັງເປັນກິດຈະກຳທີ່ດີ ເພື່ອໃຫ້ນັກຮຽນເຮັດອີກດ້ວຍ.

4 ການສັງເກດການ.

ແມ່ນໃຜ ແລະ ສິ່ງໃດທີ່ຄວນຈະສັງເກດ ? ຜູ້ອຳນວຍການໂຮງຮຽນ ຈຳເປັນຕ້ອງສັງເກດ ການສອນຂອງຄູ ໃນຫ້ອງຮຽນເປັນພາກສ່ວນໜຶ່ງ ຂອງການພັດທະນາວິຊາຊີບໂດຍທົ່ວໄປ. (ບັນ ທຶກວ່າຫົວໜ້າໂຮງຮຽນໄປຢ້ຽມຫ້ອງຮຽນຖີ່ສ່ຳໃດແລະມີການສົນທະນາຫຍັງແດ່). ການສັງເກດ ເພື່ອນດ້ວຍກັນກໍເປັນປະໂຫຍດ ໂດຍສະເພາະແລ້ວ ມັນເປັນສ່ວນໜຶ່ງຂອງການສອນ ແບບເປັນ ທີມ. ຄູສອນຈາກຫ້ອງໜຶ່ງ ສາມາດສັງເກດນັກຮຽນຈາກຫ້ອງອື່ນ. ໃຫ້ບັນທຶກການສັງເກດ ແລະ ປະກອບຄຳເຫັນ ຈາກນັ້ນ ກໍສົນທະນາ ເປັນກຸ່ມທີ່ປະກອບມີຫົວໜ້າໂຮງຮຽນ ແລະ ຄູຢ່າງເປັນ ໄລຍະໆ. ໃຫ້ເບິ່ງອາຄານ ແລະ ສະພາບແວດລ້ອມຕ່າງໆ. ກິດຈະກຳສ້າງສະພາບແວດລ້ອມ ແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນ ການຮຽນຮູ້ ໄດ້ມີຜົນກະທົບຕໍ່ປະກິດການຂອງໂຮງ ຮຽນບໍ່? “ອຸປະສັກກີດຂວາງໝົດໄປ” ແລ້ວຫຼືບໍ່ ? ຫ້ອງນ້ຳຍິງ ແລະ ຊາຍແຍກກັນ ຫຼືບໍ່ ? ເດັກຍິງ ແລະ ເດັກຊາຍທີ່ມີຄວາມສາມາດແຕກຕ່າງທັງໝົດ ໄດ້ເຂົ້າເຖິງບ່ອນຫຼິ້ນຄືກັນບໍ່ ? ໃຫ້ສັງເກດ ການປ່ຽນແປງໃນເວລາທີ່ເດັກນັກຮຽນສະແດງອອກ ແລະ ປະພຶດຕົນ. ພວກເຂົາໄດ້ຊ່ວຍເຫຼືອ ເຊິ່ງກັນແລະກັນ ຫຼືບໍ່ ເຊິ່ງປະກິດການອັນນີ້ ໃນເມື່ອກ່ອນບໍ່ເຄີຍມີ ?

5 ເອກະສານຕ່າງໆ

ສຳຫຼວດກວດກາບັນດາເອກະສານຕ່າງໆ ຂອງໂຮງຮຽນ ເຊັ່ນ: ວາລະສານ, ຈົດໝາຍ / ໜັງສືຫາຜູ້ປົກຄອງ, ບົດລາຍງານ, ແຜນການສອນ ແລະ ເອກະສານໂຄງການຫຼັກສູດ. ເອກະສານຕ່າງໆ ຂອງໂຮງຮຽນທີ່ຂຽນເຖິງພໍ່ແມ່/ຜູ້ປົກຄອງ ແລະ ຊຸມຊົນກ່ຽວກັບສະພາບແວດລ້ອມທີ່ເປັນການຮຽນຮ່ວມ ທີ່ທ່ານພະຍາຍາມຈະເຮັດ ຫຼື ບໍ່? ແຜນການສອນຂອງຄູ ແລະ ຫຼັກສູດສະທ້ອນເຖິງສະພາບແວດລ້ອມ ທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ຫຼື ບໍ່?

ຄຳຖາມ

1. ຂັ້ນຕອນໃນການວາງແຜນເພື່ອຈະກາຍເປັນໂຮງຮຽນທີ່ມີສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ມີຫຍັງແດ່?
2. ມີຂັ້ນຕອນໃດແດ່ທີ່ເຫັນວ່າມີຄວາມສຳຄັນ ແລະ ເປັນປະໂຫຍດທີ່ສຸດ? ຈົ່ງໃຫ້ເຫດຜົນ.
3. ວິທີຕິດຕາມຄວາມກ້າວໜ້າໃນການປະຕິບັດແຜນການ ການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ມີຫຍັງແດ່ ? ຈົ່ງອະທິບາຍ.

ພາກທີ II: ວິທີການເຮັດວຽກຮ່ວມກັບຄອບຄົວແລະຊຸມຊົນ

ບົດທີ 4: ຄວາມໝາຍ ແລະ ພາລະບົດບາດຂອງຊຸມຊົນ

I. ຄວາມໝາຍ ແລະ ຄວາມສຳຄັນຂອງຊຸມຊົນ

1 ຄວາມໝາຍ

ຊຸມຊົນປະກອບດ້ວຍພໍ່ແມ່ / ຜູ້ປົກຄອງຂອງນັກຮຽນ , ສະມາຊິກຄົນອື່ນໆໃນຄອບຄົວຂອງນັກຮຽນ ແລະ ຜູ້ທີ່ຢູ່ໃນເຂດບໍລິການຂອງໂຮງຮຽນ. ອາດລວມເອົາທັງພະນັກງານບຳນານ, ຄູ ແລະ ຜູ້ອຳນວຍການໂຮງຮຽນ, ປັນຍາຊົນ, ຊາວບ້ານຜູ້ທີ່ມີພູມປັນຍາທ້ອງຖິ່ນ, ເຖົ້າແກ່ແມ່ຍ, ຜູ້ຊ່ຽວຊານ. ນອກຈາກນີ້ຍັງ ປະກອບມີ ຄູບາ ແລະ ຈີ່ວຈາກວັດ, ຜູ້ເຮັດທຸລະກິດຄ້າຂາຍ, ພະນັກງານລັດ ແລະ ຊາວບ້ານທັງໝົດ. ທຸກຄົນເຫຼົ່ານີ້ສາມາດ ປະກອບສ່ວນ ທີ່ ສຳຄັນໃນການປັບປຸງການຮຽນຮູ້ຂອງເດັກ ໃນສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

2. ຄວາມສຳຄັນ

- ຊຸມຊົນແມ່ນບ່ອນອາໄສຢູ່ຂອງເດັກ.

ຊຸມຊົນແມ່ນສະພາບແວດລ້ອມຕົວຈິງ ທີ່ເດັກອາໄສຢູ່ແລະຮຽນຮູ້, ເປັນບ່ອນທີ່ເຂົານຳໃຊ້ສິ່ງທີ່ພວກເຮົາໄດ້ຖືກສອນ. ຄຸນຄ່າ ແລະ ການເຂົ້າມີສ່ວນຮ່ວມຂອງຄອບຄົວ, ຜູ້ນຳຊຸມຊົນ ແລະ ສະມາຊິກຊຸມຊົນ ແມ່ນມີຄວາມສຳຄັນເປັນທີ່ສຸດ ເພື່ອຈະນຳເອົາເດັກທຸກຄົນເຂົ້າໂຮງຮຽນ ແລະ ຊ່ວຍເຫຼືອພວກເຂົາ ໃຫ້ໄດ້ຮຽນຈົບຈົນປະສົບສຳເລັດ. ຕົວຢ່າງ: ຖ້າຄອບຄົວ ແລະ ຊຸມຊົນຕີລາຄາການສຶກສາ ທີ່ພວກເຮົາສິ່ງໃຫ້ແກ່ເດັກ(ລວມທັງຕີລາຄາພວກເຮົາໃນຖານະທີ່ເປັນຄູດ້ວຍ), ນັກຮຽນກໍຈະຕີລາຄາໂອກາດ ເພື່ອການຮຽນຮູ້ດ້ວຍເຊັ່ນກັນ. ມັນຈະຊຸກຍູ້ສິ່ງເສີມພວກເຂົາ ໃຫ້ນັບຖືພວກເຮົາ ແລະ ເພື່ອນຮ່ວມຫ້ອງຮຽນ ໂດຍສະເພາະກໍແມ່ນຜູ້ທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງ ແລະ ທັງຊຸກຍູ້ສິ່ງເສີມ ໃຫ້ພວກເຂົາໄດ້ໝູນໃຊ້ສິ່ງທີ່ໄດ້ຮຽນຮູ້ມາ ເຂົ້າໃນຊີວິດປະຈຳວັນຂອງຕົນເອງ.

- ຊຸມຊົນແມ່ນແຫຼ່ງຂໍ້ມູນທີ່ອຸດົມສົມບູນ.

ຊຸມຊົນຍັງໄດ້ໃຫ້ຂໍ້ມູນຂ່າວສານທີ່ອຸດົມສົມບູນ ແລະ ໃຫ້ຄວາມຮູ້ທາງປະຕິບັດທີ່ພວກເຮົາສາມາດໃຊ້ ເພື່ອປັບປຸງການສິດສອນຂອງເຮົາເພື່ອສົ່ງເສີມການຮຽນຮູ້ຂອງເດັກ. ຕົວຢ່າງ : ພວກເຮົາ

ສາມາດສອດແຊກນິທານ ຫຼື ບົດເພງເຂົ້າໃນການສິດສອນບົດຮຽນກ່ຽວກັບພາສາ ຫຼື ໃຊ້ເຕັກນິກ ທີ່ແຕກຕ່າງ ເພື່ອປູກຜັກ/ ຕົ້ນໄມ້ ພື້ນເມືອງ ຫຼື ລ້ຽງສັດໃນບົດຮຽນວິທະຍາສາດ.

ການເຂົ້າຮ່ວມແບບຝ່າຍດຽວ ແລະ ການມີຄຳຕອບແບບຖືກຕ້ອງທີ່ສຸດ, ວ່ອງໄວຈະໃຊ້ການບໍ່ໄດ້ຜົ ຈັກ ເທື່ອ. ມັນເປັນການປະຕິສຳພັນໃນທ່າມກາງ ຂອງການມີສ່ວນຮ່ວມຈາກພາກສ່ວນຕ່າງໆ ເຊິ່ງໃນນັ້ນຈະ ປະກອບມີຄູ, ຜູ້ບໍລິຫານ, ຄູສຶກສານິເທດ, ພໍ່ແມ່ຜູ້ປົກຄອງ, ສະມາຊິກຊຸມຊົນ ແລະ ເດັກນັກຮຽນເອງໄດ້ ເຂົ້າມີສ່ວນຮ່ວມໃນຂະບວນການປ່ຽນແປງ ເຊິ່ງຈະເຮັດໃຫ້ມີຄວາມແຕກ ຕ່າງຍືນຍົງ.

Feny de los Angels-Bautista with Marissa J. Pascual, Marjrie S. Javier, Lillian Mercado-Carreon and Cristina H. Abad. (2001). Reinventing Philippine Education : Building Schools Filipino Children Deserve. The Ford Foundation, Manila.

- ຊຸມຊົນຈະມີຊັບພະຍາກອນທີ່ມີຄຸນຄ່າສຳລັບໂຮງຮຽນ

ຊຸມຊົນຈະມີຊັບພະຍາກອນທີ່ມີຄຸນຄ່າ ສຳລັບໂຮງຮຽນທີ່ໄດ້ລິເລີ້ມພັດທະນາສະພາບແວດ ລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ໂຮງຮຽນ (BRAC) ໃນບັງຄະລາ ເທດກຳເປັນໂຮງ ຮຽນຕົວແບບໜຶ່ງ.

ຕົວແບບເບື້ອງຕົ້ນ ໃນການໃຫ້ການສະໜັບສະໜູນຂອງຊຸມຊົນ ເພື່ອສ້າງສະພາບແວດລ້ອມທີ່ເປັນ ການຮຽນ ຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ໃນປີ ຄ.ສ. 1979, ໂຮງຮຽນ (BRAC) ຫຼັງທຳອິດໄດ້ເປີດຂຶ້ນໃນບັງຄະລາເທດ ເພື່ອຕອບສະໜອງ ຄວາມ ຮຽກຮ້ອງຕ້ອງການຂອງແມ່ຍິງ ທີ່ຕ້ອງການການສຶກສາຂັ້ນພື້ນຖານໃຫ້ແກ່ລູກຫຼານຂອງຕົນ. (BRAC) ແມ່ນຄຳຫຍໍ້ມາຈາກ Bangladesh Rural Advancement Committee “ຄະນະກຳມະ ການ ເພື່ອຄວາມກ້າວໜ້າຂອງຊົນນະບົດໃນບັງກະລາເທດ”. BRAC, ມູນນິທິ ໄດ້ເຄີຍ ເຂົ້າມີສ່ວນ ຮ່ວມກ່ຽວຂ້ອງໃນຊຸມຊົນຊົນນະບົດບັງກະລາເທດມາແລ້ວ, ເຄີຍໄດ້ຊ່ວຍຜູ້ທີ່ເປັນແມ່ທັ້ງຫຼາຍ ສ້າງ ຄະນະກຳມະການໂຮງຮຽນ, ຊອກຫາສະຖານ ທີ່ຕັ້ງໂຮງຮຽນ, ຊອກຫາຄູ ແລະ ຜູ້ບໍລິຫານ ຄຸ້ມຄອງ ໂຮງຮຽນ. (BRAC) ໄດ້ກຳນົດ ເດັກທີ່ທຸກຍາກຂາດເຂີນ, ໂດຍສະເພາະ ເດັກຍິງໂດຍຜ່ານການ ສຳຫຼວດແຕ່ລະຄົວເຮືອນ. ໂຮງຮຽນຕ້ອງຮັບເອົາເດັກຍິງຈຳນວນຫຼວງຫຼາຍ, ມີຫຼັກສູດສະເພາະ, ມີ ການສິດສອນແບບເອົາເດັກເປັນໃຈກາງ ແລະ ບໍ່ລົງໂທດທາງຮ່າງກາຍ. ເມື່ອເດັກຮຽນຈົບຫຼັກສູດ ການສຶກສາຂັ້ນພື້ນຖານຂອງ(BRAC), ພວກເຂົາຈະສາມາດເຂົ້າໂຮງຮຽນຂອງລັດໄດ້. ມີເດັກນັກ ຮຽນ ຫຼາຍຄົນປະສົບ ຜົນສຳເລັດສູງ.

ພະນັກງານຄູ-ອາຈານໃນໂຮງຮຽນ ໂດຍປົກກະຕິຈະເປັນຜູ້ອາໄສຢູ່ໃນຊຸມຊົນ ແລະ ມີການ ຕິດຕໍ່ພົວພັນກັບພໍ່ແມ່ຜູ້ປົກຄອງ ຢູ່ໃນລະດັບຂ້ອນຂ້າງສູງ. ພໍ່ແມ່ຜູ້ປົກຄອງຕັດສິນໃຈເລືອກເວລາ ສຳລັບ ໄປໂຮງຮຽນ ແລະ ເຂົາສາມາດປ່ຽນຊົ່ວໂມງຮຽນໃນສົກຮຽນນັ້ນ ໃຫ້ສະດວກກັບເວລາພັກ

ແລະ ລະດູເຮັດໄຮ່ເຮັດນາ. ພໍ່ແມ່ຜູ້ປົກຄອງ ຕິດຕາມກວດກາ ການຂາດ-ການສອນຂອງຄູຢ່າງ ບໍ່ເປັນທາງການເຊິ່ງຈະມີໜ້ອຍທີ່ສຸດ. ແຕ່ລະໂຮງຮຽນຈະມີຄະນະກຳມະການ ຄຸ້ມຄອງບໍລິຫານໂຮງ ຮຽນ ເຊິ່ງປະກອບດ້ວຍພໍ່ແມ່ຜູ້ປົກຄອງ 3 ຄົນ, ຜູ້ນຳຊຸມຊົນ ແລະ ຄູ. ພວກເຂົາຮ່ວມກັນຮັບຜິດຊອບ ບໍລິຫານຄຸ້ມຄອງໂຮງຮຽນ. ສະມາຊິກພະນັກງານຂອງBRACຈັດຕັ້ງກອງປະຊຸມສຳລັບຜູ້ປົກຄອງ ແລະ ຄູ ເດືອນລະຄັ້ງ ຕາມເວລາທີ່ຜູ້ປົກຄອງ ສະດວກ. ເນື່ອງຈາກວ່າກອງປະຊຸມຈັດຂຶ້ນຕອນ ກາງເວັນ, ແມ່ຍິງສ່ວນຫຼາຍ ຈຶ່ງບໍ່ໄດ້ເຂົ້າຮ່ວມ. ໜຶ່ງໃນຕົວຊີ້ບອກຄຸນນະພາບຂອງ BRAC ແມ່ນ ຜູ້ປົກຄອງຢ່າງນ້ອຍ 70% ຕ້ອງ ເຂົ້າຮ່ວມກອງປະຊຸມຜູ້ປົກຄອງ. ໂດຍສະເລ່ຍປະມານ 80% ຂອງ ເດັກມີໜ້າເຂົ້າຮ່ວມປະຊຸມ. ພໍ່ແມ່ຜູ້ປົກຄອງສາມາດເວົ້າອອກອາກາດ ໃນສິ່ງທີ່ ເຂົາເປັນຫ່ວງເປັນໄຍ ກ່ຽວກັບ ໂຮງຮຽນ, ແຕ່ BRAC ກໍໄດ້ ກ່າວເຖິງບັນຫາຕ່າງໆ ກ່ຽວກັບ ຄ່າທຳນຽມ, ຄ່າໃຊ້ຈ່າຍອື່ນໆ, ໄລຍະທາງ, ລະບຽບວິໄນ ແລະ ຕາຕະລາງເວລາ, ດັ່ງນັ້ນຈຶ່ງມີສິ່ງທີ່ບໍ່ພໍໃຈ ໜ້ອຍທີ່ສຸດ.

ຖອດມາຈາກ *Rugh A and Bosser H. (1998) Involving Communities : Participation in the Delivery of Education Programs. Washington, DC : Creative Associates International, Inc.*

II. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຄູໃນການເຮັດວຽກຮ່ວມກັບຜູ້ປົກ ຄອງ ແລະ ຊຸມຊົນ

1 ພາລະບົດບາດຂອງຄູ

ໃນຖານະທີ່ເປັນຄູ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພວກເຮົາ ໃນການເຮັດ ວຽກກັບພໍ່ແມ່/ຜູ້ປົກຄອງ ແລະ ສະມາຊິກຊຸມຊົນມີຫຍັງແດ່ ທີ່ເຂົາຈະສາມາດສະໜັບສະໜູນສະ ພາບແວດລ້ອມ ທີ່ເປັນ ການຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້?

ຄູທຸກຄົນມີຄວາມຮັບຜິດຊອບດັ່ງນີ້:

- ສື່ສານຢ່າງເປັນປົກກະຕິກັບຄອບຄົວ: ໝາຍເຖິງສື່ສານກັບພໍ່ແມ່ ຫຼື ຜູ້ປົກຄອງ ກ່ຽວກັບ ຄວາມກ້າວ ໜ້າ ແລະຜົນສຳເລັດໃນການຮຽນຮູ້ ຂອງລູກຫຼານຂອງເຂົາ;
- ເຮັດວຽກຮ່ວມກັບຜູ້ນຳຊຸມຊົນ ເພື່ອຊອກເບິ່ງວ່າ ມີເດັກຄົນໃດທີ່ບໍ່ໄດ້ເຂົ້າ ໂຮງຮຽນ ແລະ ເປັນຫຍັງ ຈຶ່ງບໍ່ໄດ້ເຂົ້າ, ແລະ ຊອກຫາວິທີເພື່ອໃຫ້ເຂົາໄດ້ເຂົ້າໂຮງຮຽນ;
- ອະທິບາຍຄຸນຄ່າ ແລະ ຈຸດປະສົງຂອງສະພາບແວດລ້ອມທີ່ເປັນແບບຮຽນຮ່ວມ ແລະ ເປັນ ເພື່ອນມິດ ໃນການຮຽນຮູ້ໃຫ້ພໍ່ແມ່ ຜູ້ປົກຄອງຂອງເດັກໃນຫ້ອງຮຽນຂອງທ່ານຊາບ;
- ກະກຽມນັກຮຽນເພື່ອຈະປະຕິສຳພັນກັບຊຸມຊົນ ເຊິ່ງຖືວ່າເປັນສ່ວນໜຶ່ງຂອງຫຼັກສູດ ໂດຍ ຜ່ານການທັດສະນະສຶກສາພາກສະໜາມ ຫຼື ກິດຈະກຳ ແລະ ວຽກພິເສດ;

- ເຊີນຜູ້ປົກຄອງ ແລະສະມາຊິກຊຸມຊົນໃຫ້ເຂົ້າມີສ່ວນຮ່ວມໃນກິດຈະກຳຫ້ອງຮຽນ.

ຄູບາງຄົນຍັງຈະຕ້ອງຮັບຜິດຊອບໃນເລື່ອງດັ່ງຕໍ່ໄປນີ້ຕື່ມອີກ :

- ເຮັດວຽກກັບຫົວໜ້າໂຮງຮຽນ ແລະຄູຜູ້ອື່ນໆ ເພື່ອຈະສື່ສານກັບ ອົງການຈັດຕັ້ງ, ພໍ່ແມ່ ຜູ້ປົກຄອງ ແລະ ຊຸມຊົນ (ຄະນະກຳມະການບໍລິຫານຄຸ້ມຄອງໂຮງຮຽນ, ຄະນະກຳມະການການສຶກສາຂອງບ້ານ, ສະມາຄົມພໍ່ແມ່ນັກຮຽນ) ໃຫ້ຮັບຊາບກ່ຽວກັບສະພາບແວດລ້ອມທີ່ເປັນແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້;
- ຊຸກຍູ້ສົ່ງເສີມ ແລະ ເຮັດວຽກກັບພໍ່ແມ່ຜູ້ປົກຄອງ ເພື່ອໂຄສະນາຊັກຊວນຜູ້ປົກຄອງ ແລະ ຊຸມຊົນ ເພື່ອສ້າງສະພາບແວດລ້ອມທີ່ເປັນແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

2. ພາລະບົດບາດຂອງຜູ້ປົກຄອງ ແລະ ຊຸມຊົນ ຫຼື ຄະນະພັດທະນາການສຶກສາຂັ້ນບ້ານ.

ກ. ບົດບາດຂອງຜູ້ປົກຄອງເດັກ.

- **ຜູ້ປົກຄອງກໍຄືຜູ້ໂຄສະນາຊັກຊວນ.**

ຜູ້ປົກຄອງກໍຄືຜູ້ໂຄສະນາຊັກຊວນເພື່ອໃຫ້ເກີດການປ່ຽນແປງ: ຢູ່ໃນບາງຊຸມຊົນ, ພໍ່ແມ່ຜູ້ປົກຄອງ ຈະເປັນຜູ້ໂຄສະນາຊັກຊວນ ເພື່ອສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຢູ່ໃນລະດັບໂຮງຮຽນກ່ອນຄູ ແລະ ຜູ້ອຳນວຍການໂຮງຮຽນເສຍອີກ. ຕົວຢ່າງ: ຢູ່ທີ່ແຂວງພາກເໜືອຂອງປະເທດປາປົວນິວກີນີ, ຜູ້ປົກຄອງໄດ້ສະເໜີກ່ຽວກັບການຮຽນການສຶກສາຂອງລູກຫຼານ ໃຫ້ໃຊ້ພາສາທ້ອງຖິ່ນຂອງເຂົາເອງ. ອຳນາດການປົກຄອງແຂວງ ໄດ້ເຮັດວຽກຮ່ວມກັບມະຫາວິທະຍາໄລ ແລະ ອົງການຈັດຕັ້ງ ມູນລະນິທິ ເພື່ອສະໜອງການສຶກສາທີ່ມີລາຍຈ່າຍຕ່ຳ ໃນການໃຊ້ພາສາທ້ອງຖິ່ນ ຂອງເດັກໃນການສຶກສາຢູ່ໃນໂຮງຮຽນ BRAC ຂອງບັງຄະລາເທດ, ຜູ້ເປັນແມ່ໄດ້ສະເໜີຮຽກຮ້ອງ ໃຫ້ມີການສຶກສາຂັ້ນພື້ນຖານ ໃຫ້ລູກສາວ ແລະ ລູກຊາຍ ທີ່ຖືກປະປ່ອຍບໍ່ໄດ້ເຂົ້າໂຮງຮຽນ ໃນເມື່ອກ່ອນຍ້ອນຄ່າໃຊ້ຈ່າຍສູງ ແລະ ໄກບ້ານ.

- **ຜູ້ປົກຄອງກໍຄືຜູ້ຕໍ່ຕ້ານເພື່ອໃຫ້ເກີດການປ່ຽນແປງ.**

ໃນບາງຊຸມຊົນ, ພໍ່ແມ່ຜູ້ປົກຄອງອາດຕໍ່ຕ້ານການເກີດການປ່ຽນແປງ. ຜູ້ປົກຄອງບາງຄົນ, ເຫັນຕາມຄຸນຄ່າ/ຄ່ານິຍົມຂອງສັງຄົມ ອາດບໍ່ຕ້ອງການ ໃຫ້ເດັກທີ່ແຕກຕ່າງຈາກຕົນເອງ ເຂົ້າຮຽນໃນໂຮງຮຽນຮ່ວມກັບລູກຫຼານຂອງຕົນ. ບຸກຄົນເຫຼົ່ານີ້, ຄວນເປັນເປົ້າໝາຍ ເພື່ອເຮັດກິດຈະກຳໂຄສະນາຊັກຊວນ ທີ່ຈະ ສົນທະນາອະພິ ປາຍຕໍ່ໄປຂ້າງລຸ່ມ.

- **ຜູ້ປົກຄອງກໍຄືຜູ້ເຂົ້າຮ່ວມຢ່າງເຕັມໃຈເພື່ອໃຫ້ເກີດການປ່ຽນແປງ.**

ໃນຊຸມຊົນອື່ນໆ,
ພໍ່ແມ່ຜູ້ປົກຄອງອາດມີຄວາມເຕັມໃຈທີ່ສຸດທີ່ຈະເຂົ້າມາມີສ່ວນຮ່ວມກັບໂຮງຮຽນ ຖ້າຫາກທ່ານ ຂໍຮ້ອງພວກເຂົາ ແລະ ຖ້າຫາກທ່ານອະທິບາຍໃຫ້ເຂົາຮູ້ວ່າ ສະພາບແວດລ້ອມທີ່ເປັນການຮຽນ ຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແມ່ນກ່ຽວກັບຫຍັງ. ໂດຍປົກກະຕິແລ້ວ ຖ້າຜູ້ປົກຄອງ ບໍ່ເຄີຍເຂົ້າມາມີສ່ວນຮ່ວມ ໃນການສຶກສາຂອງລູກຫຼານມາກ່ອນ, ພວກເຂົາຈຳເປັນຕ້ອງໄດ້ຖືກ ເຊື້ອເຊີນເຂົ້າມາ, ຕ້ອງໄດ້ຮັບການ ຕ້ອນຮັບເປັນຢ່າງດີ ແລະ ຕ້ອງເຊີນເຂົາກັບມາອີກ.

ຂ. ບົດບາດຂອງຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ.(ຄພສບ).

- ***ໜ້າທີ່ຂອງ ຄພສບ :***

ໂຄສະນາຊົນຂວາຍ ແລະ ຊຸກຍູ້ໃນການສົ່ງເດັກໃນເກນອາຍຸເຂົ້າຮຽນ, ເກັບກຳຂໍ້ມູນທາງ ການສຶກສາ, ສ້າງແຜນທີ່ການສຶກສາບ້ານ. ຈັດກິດຈະກຳນອກໂມງຮຽນ ເພື່ອເຮັດໃຫ້ການຮຽນ-ການສອນດີຂຶ້ນ ກວ່າເກົ່າ. ລົງຕິດຕາມ, ກວດກາການຮຽນ, ຂອງນັກຮຽນ ແລະ ການສອນຂອງຄູ, ນຳເອົາຜົນການສອນ- ການຮຽນໄປປຶກສາຫາລືກັບຊາວບ້ານ, ຜູ້ປົກຄອງ ແລະ ຄູສອນ ເພື່ອ ແກ້ໄຂບັນຫາ ໃນການຮຽນຂອງນັກຮຽນ. ປະຕິບັດແຜນພັດທະນາການສຶກສາຂອງບ້ານ ແລະ ລາຍງານໃຫ້ ຄພສມ ເດືອນລະ 1 ຄັ້ງ, ສ້າງກອງທຶນ ພັດທະນາການສຶກສາບ້ານ ເພື່ອຊ່ວຍເຫຼືອ ເດັກທີ່ມີຄວາມ ຕ້ອງການຊ່ວຍເຫຼືອພິເສດ. ສະເໜີ ແລະ ປະຕິບັດການຍ້ອງຍໍ ຜູ້ທີ່ມີຜົນງານດີ ເດັ່ນ ຕໍ່ວຽກງານການສຶກສາ ແລະ ນັກຮຽນທີ່ຮຽນດີ ຮຽນເກັ່ງ.

- **ສິດ ຄພສບ** :

ພິວພັນ, ສົມທົບກັບຄະນະອຳນວຍການໂຮງຮຽນ, ຄູສອນ ແລະ ຊຸມຊົນ ເພື່ອປຶກສາຫາ ລືແກ້ໄຂບັນຫາຮ່ວມກັນ. ສ້າງແລະປະຕິບັດແຜນພັດທະນາການສຶກສາຂອງບ້ານ, ໂດຍການມີ ສ່ວນຮ່ວມກັບຊຸມຊົນຢ່າງກວ້າງຂວາງ. ປຸກລະດົມການສ້າງກອງທຶນສົ່ງເສີມການສຶກສາ ແລະ ໂດຍປະຕິບັດຕາມ ນະໂຍບາຍທີ່ຕົກລົງເຫັນດີຮ່ວມກັນຂອງ ຄພສບ ແລະ ຄພສມ. ປະຊຸມຊາວ ບ້ານ, ຜູ້ຊົງຄຸນວຸດທິ, ຄູສອນ ເພື່ອປຶກສາຫາລືກ່ຽວກັບການພັດທະນາການສຶກສາບ້ານ. ມີສິດ ຄົ້ນຄວ້າປະກອບຄຳຄິດຄຳເຫັນ ແລະ ສະເໜີຕໍ່ຄະນະພັດທະນາການສຶກສາຂັ້ນເມືອງ. ສ້າງ ຂະບວນການແຂ່ງຂັນພາຍໃນໂຮງຮຽນ ຫຼື ລະຫວ່າງໂຮງຮຽນ ເຊັ່ນ: ຜູ້ບໍລິຫານດີ, ຄູສອນດີ, ນັກຮຽນຮຽນເກັ່ງ, ສະພາບແວດລ້ອມ ໂຮງຮຽນ, ຫ້ອງຮຽນສະອາດ, ກິລາ, ສິລະປະວັນ ນະຄະດີ ແລະ ອື່ນໆ. ສ້າງຂະບວນການແລກປ່ຽນບົດຮຽນ ແລະ ປະສົບການລະຫວ່າງ ຄພສບ ພາຍໃນ ເມືອງ ແລະ ເມືອງອື່ນ.

ຄຳຖາມ :

1. ຈົ່ງບອກຄວາມໝາຍຂອງ “ຊຸມຊົນ” ?
2. ເປັນຫຍັງຈົ່ງນຳເອົາຊຸມຊົນເຂົ້າມາມີສ່ວນຮ່ວມໃນວຽກງານນີ້ ? ຈົ່ງໃຫ້ເຫດຜົນ ?
3 ພາລະບົດບາດແລະຄວາມຮັບຜິດຊອບຂອງຄູ ໃນການມີສ່ວນຮ່ວມກັບຜູ້ປົກຄອງ ແລະ ຊຸມຊົນມີຄືແນວໃດ?
4. ຜູ້ປົກຄອງມີພາລະບົດບາດໃນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຫຍັງແດ່ ?
5. ຊຸມຊົນ ແລະ ຄພສບ ມີພາລະບົດໃນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມແລະ ເປັນເພື່ອນມິດໃນການຮຽນຮູ້ຫຍັງແດ່ ?

ບົດທີ 5: ຂໍ້ມູນຂ່າວສານ ແລະ ການໂຄສະນາຊວນຂອງຄູຕໍ່ຄອບຄົວ ແລະ ຊຸມຊົນ

ເພື່ອເຮັດໃຫ້ການເຂົ້າຮ່ວມແຂກແຂງໃນການສຶກສາມີຜົນກະທົບຢ່າງແທ້ຈິງ, ຊຸມຊົນຕ້ອງໃຫ້ການສະໜັບສະໜູນຢ່າງເຕັມທີ່ ແລະ ຫ້າວຫັນເຂົ້າໄປມີສ່ວນຮ່ວມ. ເພື່ອເຮັດໃຫ້ຊຸມຊົນເຂົ້າມີສ່ວນຮ່ວມຢ່າງຫ້າວຫັນນັ້ນ, ພວກເຂົາຈຳເປັນຕ້ອງໄດ້ຮັບການຕິດຕໍ່, ໄດ້ຮັບຂໍ້ມູນຂ່າວສານ ແລະ ຖືກກະຕຸ້ນໃຫ້ປະຕິບັດດ້ວຍກັນ.

1. ວິທີຕິດຕໍ່ພົວພັນ

ມີຫຼາຍແນວທາງທີ່ມີປະສິດທິພາບໃນການເລີ້ມການສື່ສານກັບຄອບຄົວ. ຢູ່ຂ້າງລຸ່ມນີ້ຈະສະເໜີບາງວິທີການ. ໃຫ້ທົດລອງວິທີໃດໜຶ່ງທີ່ທ່ານມັກທີ່ສຸດ ແລະ ສະດວກທີ່ສຸດ ທີ່ຈະປະຕິບັດແລ້ວ ຈຶ່ງທົດລອງວິທີອື່ນໆ ຕາມທີຫຼັງ.

ຈັດກອງປະຊຸມກັບຄອບຄົວ ແລະກຸ່ມຊຸມຊົນເຊິ່ງທ່ານຈະໄດ້ແນະນຳຕົວທ່ານ, ໃຫ້ອະທິບາຍເຖິງເປົ້າ ປະສົງຂອງທ່ານສຳລັບການສິດສອນ ແລະສຳລັບການຮຽນຮູ້ຂອງເດັກ, ຄຸນຄ່າຂອງຄວາມຫຼາກຫຼາຍ ໃນຫ້ອງຮຽນທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ແລະ ສົນທະນາອະພິປາຍແນວທາງເຊິ່ງຄອບຄົວ ແລະ ສະມາຊິກຊຸມຊົນສາມາດທີ່ຈະເຂົ້າມີສ່ວນຮ່ວມ ໃນກິດຈະກຳໃນຫ້ອງຮຽນຂອງທ່ານໜຶ່ງ ຫຼື ສອງຄັ້ງຕໍ່ປີ, ໃຫ້ວາງຕາຕະລາງເວລາ ເພື່ອສົນທະນາອະພິປາຍແບບ ບໍ່ເປັນທາງການກັບຜູ້ປົກຄອງ ເພື່ອປະເມີນການຮຽນຮູ້ຂອງເດັກ. ໃຫ້ສະແດງຕົວຢ່າງຜົນງານຂອງເດັກທີ່ເຮັດໄດ້. ເນັ້ນຄວາມສາມາດພິເສດ ແລະ ຜົນສຳເລັດຂອງເດັກແຕ່ລະຄົນ ແລະ ເວົ້າລົມ ກ່ຽວກັບວິທີທີ່ເດັກແຕ່ລະຄົນສາມາດຮຽນຮູ້ ແລະ ຈະຮຽນໄດ້ດີຂຶ້ນຖ້າເອົາຊະນະອຸປະສັກບາງຢ່າງໄດ້.

- ສົ່ງຜົນງານຂອງນັກຮຽນໃຫ້ຄອບຄົວ ເພື່ອສະແດງໃຫ້ຜູ້ປົກຄອງ ເຫັນວ່າລູກຫຼານຂອງຕົນຮຽນໄດ້ດີສ່ຳໃດ. ໃຫ້ຖາມເບິ່ງຄຳຄິດເຫັນຂອງພວກເຂົາກ່ຽວກັບຜົນງານຂອງເດັກ ແລະ ເຂົາຄິດວ່າ ເດັກນ້ອຍຂອງພວກເຂົາຄວນຈະຮຽນຫຍັງໃນຂັ້ນຕໍ່ໄປ.
- ຊຸກຍູ້ສິ່ງເສີມເດັກໃຫ້ເວົ້າລົມ ກ່ຽວກັບສິ່ງທີ່ເຂົາຮຽນຮູ້ຢູ່ເຮືອນ ແລະ ໃຊ້ຂໍ້ມູນຄວາມຮູ້ດັ່ງກ່າວເຂົ້າໃນການສອນບົດຮຽນຂອງທ່ານ. ເວົ້າລົມກັບຜູ້ປົກຄອງ ກ່ຽວກັບສິ່ງທີ່ເດັກພວມຮຽນຮູ້ໃນຫ້ອງຮຽນໄດ້ເຊື່ອມໂຍງກັບຊີວິດຂອງເຂົາທີ່ຄອບຄົວຢ່າງໃດ. ເວົ້າອີກຢ່າງໜຶ່ງ, ສະແດງໃຫ້ເຫັນວ່າ ຄວາມຮູ້ຈາກຫ້ອງຮຽນຂອງເຂົາ ທີ່ຈະສາມາດໃຊ້ໄດ້ ຫຼື ຖືກນຳໃຊ້ຢູ່ຄອບຄົວ/ບ້ານ.

- ຈັດຕັ້ງການທັດສະນະສຶກສາຊຸມຊົນ ຫຼື ຂໍໃຫ້ນັກຮຽນສຳພາດພໍ່ແມ່ ຫຼື ພໍ່ຕູ້ແມ່ຕູ້ ກ່ຽວກັບ ໄວເດັກຂອງພວກເພິ່ນ ໃນຊຸມຊົນແລ້ວ ໃຫ້ເຂົາຂຽນບົດເລື່ອງ ຫຼື ບົດຄວາມກ່ຽວກັບ " ຊີວິດ ຂອງຊຸມຊົນໃນ ອະດີດ".
- ຊຸກຍູ້ສິ່ງເສີມສະມາຊິກຊຸມຊົນເຂົ້າມີສ່ວນຮ່ວມໃນກິດຈະກຳຫ້ອງຮຽນ ແລະ ເຊີນຜູ້ຊ່ຽວຊານ ໃນ ວຽກຕ່າງໆໃນຊຸມຊົນ ໄປໃຫ້ຄວາມຮູ້ໃນຫ້ອງຮຽນ.

ການພົບປະກັບພໍ່ແມ່ຜູ້ປົກຄອງໃນຕອນຕົ້ນຂອງສົກຮຽນແມ່ນມີຄວາມສຳຄັນ ເພື່ອເປັນການ ໃຫ້ໂອ ກາດຄູ ແລະ ຜູ້ປົກຄອງໄດ້ພັດທະນາການພົວພັນແລະການຮ່ວມມືເພື່ອການຮຽນຮູ້ຂອງເດັກ. ຖ້າພໍ່ແມ່ຜູ້ ປົກຄອງ ຄາດຫວັງວ່າການຢ້ຽມຢາມຄອບຄົວ ຫຼື ການເຊີນໄປພົບປະທີ່ໂຮງຮຽນເກີດຂຶ້ນ ພຽງແຕ່ຍ້ອນເດັກຖືກລົງໂທດເທົ່ານັ້ນ, ທ່ານຈຳເປັນຕ້ອງບອກກ່າວຢ່າງຈະແຈ້ງ ໃນຕອນຕົ້ນຂອງ ການຢ້ຽມຢາມ ແລະ ການ ເຊີນພໍ່ແມ່ມາພົບວ່າ: ການສົນທະນານີ້ຈະບໍ່ເປັນຄືດັ່ງທີ່ເຂົາຄິດ ຄືດັ່ງ ທີ່ ກ່າວມາຂ້າງເທິງ ຈະບໍ່ແມ່ນການ ເວົ້າກັນເລື່ອງການລົງໂທດເດັກ. ໃຫ້ບອກວ່າ: ທ່ານຕ້ອງການຮຽນຮູ້ ກ່ຽວກັບເດັກຈາກພວກເພິ່ນ ເພື່ອທີ່ຈະສາມາດສອນເດັກ ໃຫ້ມີປະສິດທິພາບຫຼາຍຂຶ້ນ. ໃຫ້ບອກເພິ່ນ ອີກວ່າທ່ານຕ້ອງການບອກພວກເຂົາ ໃຫ້ຮູ້ກ່ຽວກັບທັກສະຂອງເດັກ ເພື່ອເພິ່ນຈະສາມາດ ຊ່ວຍເດັກຢູ່ ເຮືອນ ແລະ ຈະເປັນອີກແຮງໜຶ່ງໜູນສິ່ງທີ່ເດັກພວມຮຽນຮູ້ໃນໂຮງຮຽນ.

ກິດຈະກຳປະຕິບັດ: ການຕິດຕໍ່ຄອບຄົວ ແລະ ຊຸມຊົນ

ໃຫ້ເລີ້ມດ້ວຍການສະຫລຸບສັງລວມແນວທາງເຊິ່ງທ່ານໃຊ້ໃນການພົວພັນກັບຄອບຄົວ ແລະ ຊຸມຊົນຂອງເດັກໃນປະຈຸບັນ. ທ່ານຕິດຕໍ່ເປັນຄັ້ງທຳອິດກັບພວກເຂົາແນວໃດ ແລະ ພວກເຂົາໄດ້ມີ ສ່ວນຮ່ວມ ໃນການຮຽນຮູ້ຂອງເດັກເຂົາຫຼາຍປານໃດ?

ໃຫ້ເບິ່ງຄືນອີກແນວທາງຕ່າງໆທີ່ກ່າວຂ້າງເທິງ ກ່ຽວກັບການສ້າງການຕິດຕໍ່ພົວພັນກັບຄອບ ຄົວ ແລະ ຊຸມຊົນ. ໃຫ້ຄັດເລືອກເອົາສອງ ຫຼື ສາມ (ຫຼື ຫຼາຍກວ່ານັ້ນ) ບັນດາແນວທາງທີ່ແຕກຕ່າງ ກັນເຫຼົ່ານີ້, ແລ້ວໃຫ້ຂຽນລົງ ເຊິ່ງແຕ່ລະແນວທາງ ໃຫ້ບັນທຶກ ດັ່ງນີ້:

- ສື່ ອຸປະກອນອັນໃດແດ່ທີ່ທ່ານຄວນກະກຽມ (ຖ້າມີ);
- ວິທີທີ່ທ່ານຈະໃຊ້ສື່ສານກັບຄອບຄົວ ຫຼື ສະມາຊິກຊຸມຊົນ;
- ເວລາປະຕິບັດກິດຈະກຳໂດຍປະມານ ແລະ ວັນເວລາອື່ນໆ ທີ່ກ່ຽວຂ້ອງເຊັ່ນ ໂອກາດ ພິເສດ. ຕໍ່ໄປໃຫ້ຕັດສິນໃຈ ຖ້າແນວທາງຕ່າງໆເຫຼົ່ານີ້ສາມາດເຊື່ອມໂຍງເຂົ້າກັນໄດ້. ຕົວຢ່າງ: ທ່ານອາດຈະ ຢາກຈັດຕັ້ງກອງປະຊຸມກຸ່ມໃນຕອນຕົ້ນສົກຮຽນ ຫຼື ຕົ້ນພາກຮຽນ. ໃນກອງປະຊຸມນີ້, ທ່ານສາມາດ ຊຸກຍູ້ສິ່ງເສີມ ຫຼື ແຕ່ງຕັ້ງ ໃຫ້ສະມາຊິກຄອບຄົວເປັນຜູ້

ຊ່ວຍຫ້ອງຮຽນ ແລະ ຂໍຮ້ອງໃຫ້ຜູ້ຊ່ຽວຊານອາສາສະໝັກໄປໃຫ້ບົດຮຽນພິເສດແກ່ເດັກ. ໃຫ້ຂຽນວັນເວລາທີ່ຈະເລີ້ມປະຕິບັດແລະວັນເວລາ ແລະ ເຫດການທີ່ກ່ຽວຂ້ອງອື່ນໆ ລົງ ໃສ່ຕາຕະລາງເຄື່ອນໄຫວ ຫຼື ປຶ້ມບັນທຶກຕາຕະລາງເຄື່ອນໄຫວ ເພື່ອວ່າທ່ານຈະສາມາດ ສ້າງ: “ແຜນພັດທະນາການເຂົ້າມີສ່ວນຮ່ວມຂອງຄອບຄົວ ແລະ ຊຸມຊົນ” ແບບງ່າຍໆ.

ກໍລະນີສຶກສາ: ການຕິດຕໍ່ສື່ສານລະຫວ່າງ ຄູ-ຄອບຄົວ

ໃນໂຮງຮຽນເພື່ອນເດັກທີ່ປະເທດໄທ, ພໍ່ແມ່ຜູ້ປົກຄອງແລະສະມາຊິກຊຸມຊົນໄດ້ຕອບຄຳຖາມນີ້ ຈາກ ແບບຟອມປະເມີນຜົນ, “ສິ່ງໃດສຳຄັນທີ່ສຸດໃນໂຮງຮຽນຂອງພວກເຮົາ ແລະ ຍ້ອນຫຍັງ?”. ຂໍ້ໜຶ່ງ ທີ່ກ່າວເຖິງ ໃນລະດັບບູລິມະສິດແມ່ນການຕິດຕໍ່ສື່ສານລະຫວ່າງຄູ-ຄອບຄົວ. ພວກເຂົາເວົ້າວ່າ: “ຄູ ແລະ ຜູ້ປົກຄອງຂອງເດັກທຸກຄົນມີໝາຍນັດປະຊຸມ ໃນແຕ່ລະພາກຮຽນ ເພື່ອປຶກສາຫາລື ກ່ຽວກັບ ພຶດຕິກຳ ແລະ ການຮຽນຮູ້ ຂອງເດັກ. ນີ້ເປັນເລື່ອງສຳຄັນ ຍ້ອນວ່າມັນສາມາດທີ່ຈະສະໜອງທິດທາງ ໃນການແກ້ບັນຫາຕ່າງໆ ທີ່ມີ ໃນໝູ່ສະມາຊິກກຳມະການໂຮງຮຽນ, ສະມາຊິກ ທີ່ສຳຄັນຂອງຊຸມຊົນ ແລະ ໂຮງຮຽນ; ມັນເພີ້ມທະວີການສົ່ງຂ່າວຄາວ ແລະ ການຕິດຕໍ່ສື່ສານຈາກໂຮງຮຽນສູ່ຊຸມຊົນ; ແລະ ມັນຈະສ້າງຄວາມເຂົ້າໃຈລະຫວ່າງ ພໍ່ແມ່ ຜູ້ປົກຄອງ ແລະ ຄູ.

ເປັນສິ່ງສຳຄັນທີ່ຈະຕ້ອງໃຫ້ຂໍ້ມູນຂ່າວສານ ແກ່ຜູ້ປົກຄອງຢ່າງເປັນປົກກະຕິ ກ່ຽວກັບ ຄວາມກ້າວໜ້າຂອງເດັກໃນການຮຽນຮູ້. ນີ້ໝາຍຄວາມວ່າ ການນຳໃຊ້ວິທີການປະເມີນຊ່ວຍຄູ, ນັກຮຽນ ແລະ ຜູ້ປົກຄອງ ໃຫ້ຮູ້ວ່າມີທັກສະໃດແດ່ ເດັກໄດ້ພັດທະນາດີຂຶ້ນ ໃນເລື່ອງການອ່ານ ອອກຂຽນເປັນ, ການຄຳນວນ, ທັກສະຊີວິດ ແລະ ວິຊາອື່ນໆ. ຜູ້ປົກຄອງຈຳເປັນຕ້ອງຮູ້ວ່າ ລູກຫຼານຂອງຕົນໄດ້ຮຽນຮູ້ຫຍັງແດ່ໄດ້ດີ ແລະ ສິ່ງໃດລູກຫຼານຈຳເປັນຕ້ອງຮຽນຕື່ມອີກ. ເສັ້ນທາງ ໜຶ່ງເພື່ອປະຕິບັດສິ່ງດັ່ງກ່າວຢ່າງປະດິດສ້າງ ແມ່ນໂດຍຜ່ານການໃຊ້ແຜນພູມລະຫັດສີ ເຊິ່ງມີປະ ສິດທິຜົນດີ ໂດຍສະເພາະກັບຜູ້ປົກຄອງທີ່ກືກໜັງສື. ຕົວຢ່າງ: ຢູ່ໃນແຜນພູມ 1 ຂ້າງລຸ່ມ, ສີໜຶ່ງໆ ຈະບອກໃຫ້ຮູ້ເຖິງທັກສະທີ່ຈຳເປັນສຳລັບຄະນິດ ສາດຫ້ອງ ປ.3

ແຜນພູມ 1. ແຜນພູມລະຫັດສີຂອງເນື້ອໃນ ແລະ ກິດຈະກຳສຳລັບເດັກຫ້ອງ ປ.3


ລະດັບ	(8 ໃນ 10 ຖືກຕ້ອງ ເພື່ອສືບຕໍ່ລະດັບຕໍ່ໄປ
ສີແດງ	• ຮູ້ຄ່າຂອງເງິນ (ເຖິງ 100) • ຮູ້ຂຽນຈຳນວນຕ່າງໆ • ລົບເລກ - ເລກດ່ຽວ ; ບວກ - ຈຳນວນດ່ຽວ ແລະ ຈຳນວນສອງຫຼັກ
ສີສົ້ມ	• ຄິດເລກໃນໃຈ (ບວກ, ລົບ) • ການຫານ - ເລກຈຳນວນດ່ຽວ • ອ່ານໂຈດບັນຫາຄະນິດສາດ
ສີເຫຼືອງ	• ການຄູນ • ການລົບ ແລະ ການບວກຈຳນວນສອງຫຼັກ • ການວັດແທກ (ລະຍະທາງ, ບໍລິມາດ)
ສີຂຽວ	• ກຳນົດຈຳນວນເຖິງ 700 • ການລົບ ແລະ ການບວກດ້ວຍການຈັດກຸ່ມຄືນໃໝ່ • ການລົບເລກຈຳນວນສາມຫຼັກ ແລະ ສອງຫຼັກ • ການກຳນົດຈຳນວນເລກສາມຫຼັກ
ສີຟ້າ	• ການຄູນ - ຈຳນວນເລກສອງຫຼັກ ແລະ ເລກດ່ຽວ • ການຫານ - ຈຳນວນເລກສອງຫຼັກ ແລະ ເລກດ່ຽວ • ການອ່ານໂຈດບັນຫາຕ່າງໆ
ສີມ້ວງ	• ການຄູນ - ຈຳນວນເລກສາມຫຼັກ ແລະ ເລກດ່ຽວ • ການວັດແທກ (ລະຍະທາງ, ຂອງແຫລວ) • ການອ່ານໂຈດບັນຫາຕ່າງໆ

ຖອດມາຈາກ *duPlessis J. (2003) Rainbow Charts and C-O-C-O-N-U-T-S: Teacher Development for Continuous in Malawi Classrooms. Washington, DC: America Institutes for Research.*

ຈາກນັ້ນໃຊ້ແຜນພູມ1, ລະຫັດສີ “ແຜນພູມສາຍຮຸ້ງ” ທີ່ເຮັດຂຶ້ນເພື່ອສະແດງ ຄວາມກ້າວໜ້າ ຂອງເດັກ ແລະ ເພື່ອຮັບປະກັນວ່າຄູ, ນັກຮຽນ ແລະ ຜູ້ປົກຄອງຮ່ວມກັນຕິດຕາມຊ່ວຍເຫຼືອການຮຽນ ຮູ້ຂອງເດັກ. ຢູ່ໃນແຜນພູມສາຍຮຸ້ງ (ແຜນພູມ 2), ເດັກແຕ່ລະຄົນມີການໝາຍ “ໜ້າເບີກບານ”

ພ້ອມທັງມີຊື່ຢູ່ໃນນັ້ນ. ເມື່ອພວກເຂົາປັບປຸງຢ່າງກ້າວໜ້າທັກສະດ້ານຄະນິດສາດ ດັ່ງທີ່ຊີ້ໃຫ້ເຫັນໃນ ແຜນພູມລະຫັດສີ, ການໝາຍ ຈະຖືກເຄື່ອນໄປສູ່ສີທີ່ສອດຄ່ອງກັບລະດັບທັກສະຂອງເຂົາ. ຖ້າຫາກ ຄູສັງເກດເຫັນວ່າ ເດັກບາງຄົນຢູ່ຄົງທີ່ລະດັບເກົ່ານານເກີນໄປ, ລາວສາມາດທີ່ຈະຫາວິທີຊ່ວຍ ໃຫ້ ເດັກຮຽນຮູ້ສິ່ງທີ່ກຳນົດໄວ້ ເພື່ອເຄື່ອນໄປສູ່ລະດັບສູງຕໍ່ໄປ.

ແຜນພູມ 2. ແຜນພູມສາຍຮຸ້ງຂອງຄວາມກ້າວໜ້າຂອງນັກຮຽນ.



ເຖິງວ່າຄູຈະໃຊ້ແຜນພູມສາຍຮຸ້ງ, ລາຍການທັກສະ ຫຼືບັດລາຍງານຄວາມກ້າວໜ້າ ຫຼື ບໍ່ກໍຕາມ, ການ ໃຫ້ຂໍ້ມູນ ກ່ຽວກັບຄວາມກ້າວໜ້າຂອງເດັກແມ່ນມີຄວາມສຳຄັນຢ່າງໃຫຍ່ຫຼວງທີ່ສຸດໃນການສ້າງ ແລະ ຮັກສາ ການຕິດຕໍ່ສື່ສານ ລະຫວ່າງ ຄູ-ຄອບຄົວ.

ກິດຈະກຳເພື່ອປະຕິບັດ: ການຫຼິ້ນເກມຍອດນິຍົມ

ເພື່ອປະຊຸມພົບປະກັບຜູ້ປົກຄອງ, ທ່ານອາດຕ້ອງການຊ່ວຍໃຫ້ພວກເຂົາເຂົ້າໃຈ ຄວາມໝາຍທີ່ວ່າ "ບັນຈຸ ເດັກຜູ້ທີ່ ຖືກປະປ່ອຍ" ກິດຈະກຳທີ່ມີຄຸນຄ່າເພື່ອເຮັດສິ່ງນີ້ແມ່ນ "ການຫຼິ້ນເກມຍອດນິຍົມ"

ຢູ່ໃນກິດຈະກຳນີ້ ໃຫ້ທ່ານກຽມກາໝາຍທີ່ມີສອງສີແຕກຕ່າງກັນ ເຊັ່ນ ສີແດງ ແລະ ສີຟ້າ ສຳລັບໃຫ້ຄົນຕິດໃສ່ເສື້ອໂດຍໃຊ້ສະກ້ອດ ຫຼື ເຂັມຫມຸດ. ແຕ່ລະຄົນຄວນມີກາໝາຍໜຶ່ງອັນ, ເອົາ ສີແດງ ໃຫ້ຜູ້ຍິງ ແລະ ຜູ້ຊາຍບາງຄົນ. ໃຫ້ອະທິບາຍວ່າໃນກິດຈະກຳນີ້ ອະພິສິດເໜືອກວ່າຄົນອື່ນ ໃນ ຂະນະທີ່ ບາງຄົນຈະຮູ້ ສຶກວ່າຖືກປະປ່ອຍ. ບອກໃຫ້ຄົນທີ່ມີກາໝາຍສີແດງນັ່ງຢູ່ດ້ານຫຼັງຂອງຫ້ອງ ຫຼື ສີແດງທັງໝົດໃຫ້ນັ່ງຢູ່ດ້ານ ໜຶ່ງຂອງຫ້ອງ. ຈາກນັ້ນ, ໃຫ້ສົນທະນາຢ່າງມີຄວາມສຸກກັບຜູ້ທີ່ມີກາ ໝາຍສີຟ້າ. ໃຫ້ປະປ່ອຍເມີນເສີຍຕໍ່ກຸ່ມ ທີ່ມີກາໝາຍສີແດງຈຳນວນໜຶ່ງນັ້ນ; ໃຫ້ແນມເບິ່ງພວກເຂົາ ແບບຮ້າຍໆເປັນບາງຄັ້ງຄາວ ແລະ ບອກໃຫ້ເຂົານັ່ງຢູ່ງຽບໆ ຫຼື ຫ້າມບໍ່ໃຫ້ກະວົນກະວາຍ ຫຼື ບໍ່ໃຫ້ຍິ້ມ. ໃຫ້ສືບຕໍ່ສົນທະນາກັບກຸ່ມກາໝາຍສີຟ້າ. ໃຫ້ສືບ ຕໍ່ເຮັດ 5 -10 ນາທີ. ທ່ານອາດຈະໃຫ້ກຸ່ມສີຟ້າ ບາງຄົນບອກໃຫ້ກຸ່ມສີແດງງຽບອີກດ້ວຍ. ໃນຕອນທ້າຍຂອງ 10 ນາທີ, ໃຫ້ບອກທຸກຄົນເອົາກາ ໝາຍຂອງເຂົາອອກ ແລະ ມານັ່ງດ້ວຍກັນອີກ. ໃຫ້ຖາມຄຳຖາມດັ່ງຕໍ່ໄປນີ້:

- **ຮູ້ສຶກຢ່າງໃດທີ່ມີກາໝາຍສີຟ້າ?**
- **ຮູ້ສຶກຢ່າງໃດທີ່ມີກາໝາຍສີແດງ?**
- **ຖ້າທ່ານໃສ່ ກາໝາຍສີແດງແລ້ວ, ທ່ານຢາກຈະມີກາໝາຍສີຟ້າບໍ່?**
- **ທ່ານສາມາດເຮັດສິ່ງໃດໜຶ່ງໄດ້ບໍ່ເພື່ອຈະໄດ້ກາໝາຍສີຟ້າ?**
- **ການຖືກປະປ່ອຍໝາຍຄວາມວ່າແນວໃດ?**
- **ໃຜເປັນຜູ້ເຮັດການປະປ່ອຍ? ໃຜເປັນ (ຫຼືອາດຈະເປັນ) ຜູ້ທີ່ດ້ອຍທີ່ສຸດ** (Most vulnerable)**?**

ຄວນຈຳໄວ້ວ່າ ບຸກຄົນທີ່ມັກຈະຖືກປະປ່ອຍ (ເຊັ່ນຜູ້ພິການ) ອາດຈະຮູ້ສຶກອັບອາຍ, ອຶດອັດ ຫຼື ຖືກລົງໂທດຍ້ອນວ່າພວກເຂົາມີລູກເປັນພິການ; ພວກເຂົາຖືກປະປ່ອຍເປັນສອງເທົ່າ. ຍິ່ງໄປກວ່ານັ້ນ, ເດັກຜູ້ທີ່ດ້ອຍກ່ອນໝູ່ໝົດ ແມ່ນເດັກທຸກຍາກທີ່ເປັນພິການ, ເດັກຊົນເຜົ່າ ແລະ ເດັກບໍ່ສາມາດ ເວົ້າພາສາທີ່ຄົນສ່ວນໃຫຍ່ເວົ້າກັນ ແລະ ໂດຍສະເພາະເດັກຍິງ. ເດັກເຫຼົ່ານີ້ອາດຖືກປະປ່ອຍດ້ວຍ ຫຼາຍເຫດຜົນ ໃນເວລາດຽວກັນ (ຕົວຢ່າງ: ເປັນຄົນທຸກ, ເປັນເດັກຍິງຊົນເຜົ່າພິການ ທີ່ບໍ່ສາມາດ ເຂົ້າໃຈດີ ໃນສິ່ງທີ່ເວົ້າກັນໃນຫ້ອງຮຽນ). ນີ້ແຫຼະຄື ບັນດາເດັກທີ່ພວກເຮົາກຳລັງຊອກເອົາມາເຂົ້າ ຮຽນໃນໂຮງຮຽນທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້.

ບັດນີ້, ໃຫ້ໝູນໃຊ້ບົດຮຽນຂ້າງເທິງເພື່ອອະທິບາຍຄວາມໝາຍ ຄຳວ່າ“ຮຽນຮ່ວມ” ແລະ “ເປັນ ເພື່ອນມິດໃນການຮຽນຮູ້”ໄດ້ດີຂຶ້ນ. ໃຫ້ສົນທະນາຜົນປະໂຫຍດຂອງ “ການຮຽນຮູ້ແບບຮຽນຮ່ວມ” ແລະ “ສະພາບແວດລ້ອມແບບຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້” ສາມາດສ້າງຂຶ້ນ ໂດຍຜ່ານການ ຮ່ວມມືກັນລະຫວ່າງຄູ ແລະ ຜູ້ປົກຄອງ.

ແນວຄິດ: ກິດຈະກຳນີ້ສາມາດໃຊ້ເພື່ອຊ່ວຍເດັກເຂົ້າໃຈຄວາມໝາຍຂອງ "ການຖືກປະປ່ອຍ" ແລະ ເປັນ ຫຍັງມັນຈຶ່ງສຳຄັນເພື່ອຕີລາຄາໃຫ້ຄຸນຄ່າພື້ນຖານ ແລະ ຄວາມແຕກຕ່າງທີ່ຫຼາກຫຼາຍ.

2 . ການແຈ້ງຂໍ້ມູນ ສຮພຮ ໃຫ້ແກ່ຊຸມຊົນຮັບຊາບ.

ນອກຈາກການລົງທະບຽນໂອ້ລົມກັບພໍ່ແມ່ຜູ້ປົກຄອງແລ້ວ, ຄູບາງຄົນກໍສາມາດເຮັດວຽກກັບ ຜູ້ອຳນວຍການໂຮງຮຽນ ແລະ ຄະນະຮັບຜິດຊອບ ຫຼື ຄະນະກຳມະການປະສານງານສ້າງສະພາບ ແວດລ້ອມ ທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ເພື່ອອະທິບາຍການພັດທະນາ ສະພາບແວດລ້ອມ ດັ່ງກ່າວ ໃຫ້ກຸ່ມໃຫຍ່ລວມທັງສະມາຊິກຊຸມຊົນຮັບຊາບ. ຖ້າທ່ານເປັນໜຶ່ງ ໃນຄົນ ເຫຼົ່ານີ້, ບາງວິທີທີ່ທ່ານສາມາດຈະອະທິບາຍສະພາບແວດລ້ອມ ທີ່ເປັນການຮຽນຮ່ວມ ແລະ ເປັນ ເພື່ອນມິດໃນການຮຽນຮູ້ເຊິ່ງປະ ກອບດ້ວຍສິ່ງເຫຼົ່ານີ້ :

2.1 ຂໍ້ມູນຂ່າວສານທີ່ເປັນສິ່ງພິມ

ໃຫ້ກະກຽມແຜ່ນພັບ ຫຼື ຂ່າວສານໂຮງຮຽນເພື່ອແຈກຢາຍ ໃຫ້ເຊີນນັກຂ່າວຈາກທ້ອງຖິ່ນ ເພື່ອມາຢ້ຽມຢາມໂຮງຮຽນ ແລະ ຊຸກຍູ້ໃຫ້ຂ່າວສານທ້ອງຖິ່ນຂຽນ ກ່ຽວກັບໂຮງຮຽນທີ່ມີສະ ພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ສະແດງໃຫ້ນັກ ຂ່າວເຫັນຜົນປະໂຫຍດຂອງໂຮງຮຽນ ທີ່ມີສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ແລະ ອະທິບາຍແຜນຂອງໂຮງຮຽນທີ່ຈະສະໜອງການສຶກສາ ທີ່ມີຄຸນນະພາບ ສຳລັບເດັກທຸກຄົນ.

2.2 ການປະກາດຂ່າວທາງໂທລະໂຄ່ງ, ວິທະຍຸ ແລະໂທລະພາບແກ່ປະຊາຊົນ

ເຊິ່ງໂຮງຮຽນນຳໃຊ້ວິທະຍຸ ແລະ ໂທລະທັດ ເພື່ອສະແດງ ແລະ ບອກກ່າວພໍ່ແມ່ຜູ້ປົກຄອງ ກ່ຽວ ກັບຄວາມຈຳເປັນທີ່ຕ້ອງໃຫ້ລູກຫຼານເຂົ້າເຈົ້າເຂົ້າໂຮງຮຽນ.

2.3 ການປະຊຸມຊຸມຊົນ ຫຼື ປະຊຸມກຸ່ມ

ໃຫ້ວາງແຜນຈັດກອງປະຊຸມເຝິກອົບຮົມ 1-3 ວັນ. ການເຝິກອົບຮົມຈະເປັນປະໂຫຍດຊ່ວຍ ໃນການແນະນຳໂຮງຮຽນ ໃຫ້ປະຊາຊົນທີ່ມາໃໝ່ ໂດຍສະເພາະຄອບຄົວທີ່ມີເດັກບໍ່ໄດ້ເຂົ້າ ໂຮງຮຽນ. ການເຝິກອົບຮົມສາມາດທີ່ຈະອະທິບາຍພາລະກິດຂອງໂຮງຮຽນ ໃນການໃຫ້ການ ສຶກສາເດັກທຸກຄົນ ແລະ ສາມາດອະທິບາຍສະພາບແວດລ້ອມຂອງການຮຽນຮູ້ ແບບມີສ່ວນ ຮ່ວມ ແລະ ຕັ້ງໜ້າຂອງໂຮງຮຽນ. ສິ່ງສຳຄັນອີກອັນໜຶ່ງ ກໍຄື ການຮັບຟັງ ແລະ ການຕອບຂໍ້ ຂ້ອງໃຈ ແລະ ຄຳຖາມຂອງ ຜູ້ປົກຄອງ ໃນລະຫວ່າງການປະຊຸມຄັ້ງທຳອິດນີ້ ແລະ ຄັ້ງຕໍ່ໆໄປ

ລວມທັງ ການຮັບເອົາແນວຄວາມຄິດ ກ່ຽວກັບວິທີທີ່ຈະສາມາດປັບປຸງຄຸນນະພາບການສຶກສາທີ່ໂຮງຮຽນຂອງທ່ານໃຫ້ດີຂຶ້ນກວ່າເດີມ.

2.4 ດຶງດູດເອົາການບໍລິການຕ່າງໆຂອງສັງຄົມເຂົ້າຮ່ວມ.

ເພາະວ່າການບໍລິການຕ່າງໆ ຂອງສັງຄົມອາດເປັນການດີ ທີ່ຈະດຶງເຂົ້າມາມີສ່ວນຮ່ວມໃນໂຮງຮຽນ ຂອງທ່ານເມື່ອມັນກາຍເປັນການຮຽນຮ່ວມຫຼາຍຂຶ້ນ, ໃຫ້ຕິດຕໍ່ພົວພັນກັບເຂົາ ໃນຖານະທີ່ເປັນຍຸດທະສາດໜຶ່ງທີ່ສຳຄັນຂອງທ່ານ. ພວກເຂົາສາມາດທີ່ຈະສະໜອງຊັບພະຍາກອນທີ່ສຳຄັນ ແລະ ຊ່ວຍປ້ອງກັນສິດທິຂອງເດັກທ່ານ.

2.5 ເຊື່ອມໂຍງ (ສ້າງເຄືອຂ່າຍ) ກັບໂຮງຮຽນອື່ນໆ.

ໃນບາງປະເທດ, ຢ່າງຕ່ຳ 3 ໂຮງຮຽນຈະເຮັດວຽກຮ່ວມກັນເພື່ອສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອໃຫ້ມີການຮຽນຮ່ວມຫຼາຍຂຶ້ນ. ຄູແລກປ່ຽນບົດຮຽນກັນກ່ຽວກັບວິທີການສິດສອນແບບໃໝ່ທີ່ພວກເຂົາພວມໃຊ້ຢູ່ ຫຼື ວິທີທາງທີ່ພວກເຂົາຈະດຶງດູດເອົາສະມາຊິກຊຸມຊົນ ເຂົ້າຮ່ວມໃນຫ້ອງຮຽນຂອງເຂົາ. ພວກເຂົາເປັນເຈົ້າພາບຈັດ ເຝິກອົບຮົມເພື່ອຍົກລະດັບຄວາມຮູ້ຂອງຄູ ໃຫ້ທັນສະໄໝ. ພວກເຂົາຮ່ວມຈັດຕັ້ງງານ/ເຫດການຕ່າງໆຂອງຊຸມຊົນ ເພື່ອໃຫ້ເອົາເດັກທຸກຄົນເຂົ້າໂຮງຮຽນ ຫຼື ຮ່ວມກັນຈັດຕັ້ງການທັດສະນະສຶກສາ ເພື່ອໃຫ້ເດັກສາມາດຮຽນຮູ້ຈາກຊຸມຊົນຕ່າງໆ ນອກເໜືອຈາກຊຸມຊົນຂອງຕົນເອງ.

3 ຍຸດທະສາດຂອງການໂຄສະນາຊົນຂວາຍ.

ການໂຄສະນາຊົນຂວາຍຈະກ່ຽວຂ້ອງກັບການສຶກສາ, ການປະຊາສຳພັນ, ການຍາດແຍ່ງການຊ່ວຍເຫຼືອ ແລະ ການເອົາຄົນອື່ນຊ່ວຍບອກຕໍ່ຂໍ້ມູນຂ່າວສານຂອງທ່ານ. ຜູ້ປົກຄອງ ແລະ ສະມາຊິກຊຸມຊົນຈະສາມາດກາຍເປັນຜູ້ໂຄສະນາຊົນຂວາຍ ເພື່ອສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ໄດ້ຢ່າງໃດ?

3.1 ຊຸກຍູ້ສິ່ງເສີມໃຫ້ຜູ້ປົກຄອງບອກຄົນອື່ນຕໍ່ກ່ຽວກັບໂຮງຮຽນທີ່ມີ ສຮພຮ.

ຜູ້ປົກຄອງທີ່ເປັນຜູ້ໂຄສະນາຊົນຂວາຍອາດຕ້ອງການໃຊ້ບາງຂໍ້ມູນຄວາມຮູ້ເຊັ່ນດຽວກັບທີ່ທ່ານໃຊ້ ເພື່ອບອກກ່າວກ່ຽວກັບສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ໃຫ້ເຂົາຮັບຊາບເຊັ່ນ: ແຜ່ນພັບ, ຂ່າວສານ ຫຼືຜົນງານຂອງເດັກ. ພວກເຂົາອາດມີປະສິດ ທິພາບພິເສດໃນການສົນທະນາ ເວົ້າລົມກັບຜູ້ປົກຄອງທີ່ຕໍ່ຕ້ານການປ່ຽນແປງ, ໃນການອະທິບາຍຄຸນຄ່າຂອງຄວາມຫຼາກຫຼາຍ ໃນໂຮງຮຽນ ແລະ ຫ້ອງຮຽນ ໂດຍຜ່ານປະສົບການຂອງເຂົາເອງ ຫຼື ຂອງຜູ້ອື່ນໆ ແລະ ໃນການເຮັດໃຫ້ເຂົາໝັ້ນໃຈວ່າ ຄຸນນະພາບ

ການສຶກສາຈະມາກ່ອນ ເພິ່ນຢູ່ໃນໂຮງຮຽນທີ່ມີສະພາບແວດລ້ອມ ທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

3.2 ຊັກຈູງພໍ່ແມ່ຜູ້ປົກຄອງເຂົ້າມີສ່ວນຮ່ວມໃນຫ້ອງຮຽນເພື່ອຊ່ວຍເດັກທີ່ເຄີຍຖືກປະປ່ອຍ.

ເມື່ອພໍ່ແມ່ຜູ້ປົກຄອງມາເຫັນວ່າ ພວກເຂົາໄດ້ຮັບການຍິນດີຕ້ອນຮັບເຂົ້າມາໃນໂຮງຮຽນ, ພວກເຂົາອາດຈະສະໝັກມາເລື້ອຍໆ ແລະ ມາຊ່ວຍທ່ານ. ຖ້າພວກເຂົາບໍ່ຢາກມາ, ໃຫ້ທ່ານ ວາງແຜນກິດ ະກຳ ສຳລັບຜູ້ປົກຄອງ ຫຼື ສະມາຊິກຊຸມຊົນ ແລະ ເຊີນເຂົາມາຊ່ວຍທ່ານ. ຕົວຢ່າງ: ຜູ້ປົກຄອງ ຫຼື ສະມາຊິກຊຸມຊົນສາມາດ ທີ່ຈະເປັນອາສາສະໝັກ ຊ່ວຍທ່ານ ໃນການສອນພາສາ ຫຼື ຊ່ວຍເດັກພິການ. ພວກເຂົາສາມາດອ່ານໃຫ້ເດັກຟັງ ແລະ ຟັງເດັກ ອ່ານ. ນອກຈາກນັ້ນ ພວກເຂົາຍັງສາມາດ ຊ່ວຍຕິດຕາມກິດຈະກຳກຸ່ມ ແລະ ເຮັດໃຫ້ຄູມີ ເວລາຫວ່າງ ເພື່ອເຮັດວຽກກັບລາຍບຸກຄົນ ຫຼື ກຸ່ມຍ່ອຍ ທີ່ຕ້ອງການເອົາໃຈໃສ່ເພີ້ມເຕີມ. ພວກເຮົາຈະ ສຳຫຼວດແນວທາງອື່ນໆເພື່ອດຶງເອົາຜູ້ປົກຄອງ ແລະ ສະມາຊິກຊຸມຊົນ ໃນຫົວຂໍ້ ຕໍ່ໄປ ຂອງເຄື່ອງມືນີ້.

3.3 ນຳເອົາຜູ້ປົກຄອງເຂົ້າມີສ່ວນຮ່ວມໃນກິດຈະກຳຄົ້ນຫາເດັກທີ່ຖືກປະປ່ອຍບໍ່ເຄີຍ ເຂົ້າ ໂຮງຮຽນ.

ຍົກຕົວຢ່າງ: ຈັດງານລົງທະບຽນເຂົ້າຮຽນທີ່ໂຮງຮຽນກ່ອນເລີ້ມຕົ້ນສົກຮຽນໃໝ່ ເພື່ອດຶງ ດູດເອົາທຸກໆຄອບຄົວຈາກຊຸມຊົນ ເຂົ້າຮ່ວມແລ້ວລົງທະບຽນເດັກທຸກຄົນເຂົ້າຮຽນ. ພໍ່ຄ້າຊາວ ຂາຍ ແລະ ນັກທຸລະກິດ ທ້ອງຖິ່ນອາດຕ້ອງການທີ່ຈະປະກອບສ່ວນຂອງຂວັນເລັກໆນ້ອຍໆ ເພື່ອມາຈັບສະຫຼາກກັນ ແລະ ພໍ່ແມ່/ຜູ້ປົກຄອງກໍຄືຄູ ກໍສາມາດບໍລິຈາກຊີ້ນປາອາຫານ ແລະ ຈັດຕັ້ງການຫຼິ້ນເກມ. ການຟ້ອນ ແລະ ຮ້ອງເພງກໍອາດລວມຢູ່ດ້ວຍ. ກິດຈະກຳທັ້ງໝົດ ແມ່ນ ເລັ່ງໃສ່ຄວາມສຳຄັນຂອງຄຸນນະພາບການສຶກສາ ແລະ ແນວທາງເຊິ່ງໂຮງຮຽນ ພ້ອມທັ້ງຊຸມ ຊົນສາມາດເຮັດວຽກຮ່ວມກັນ ເພື່ອສຶກສາອົບຮົມເດັກທຸກຄົນ. ການລົງທະບຽນໃນໂຮງຮຽນ ແຫ່ງໜຶ່ງ ທີ່ປະເທດກົວເຕມາລາ ມີການຫຼິ້ນລະຄອນຕະຫລົກ, ມີການຫຼິ້ນເກມຕ່າງໆ ແລະ ມີການແຈກລາງວັນທີ່ປະຕູທາງເຂົ້າ ໄດ້ມີການລົງທະບຽນ ເດັກເຂົ້າຮຽນຈຳນວນຫຼວງຫຼາຍ ຈົນໂຮງຮຽນບໍ່ສາມາດຮັບໄດ້ໝົດ ແລະ ຕ້ອງ ໄດ້ສ້າງແຜນ ເພື່ອກໍ່ສ້າງອາຄານຮຽນຫຼັງໃໝ່, ແນວຄວາມຄິດອື່ນໆມາກມາຍ ເພື່ອດຶງເອົາຜູ້ປົກຄອງ ແລະ ຊຸມຊົນເຂົ້າມາກ່ຽວຂ້ອງໃນກິດ ຈະກຳຄົ້ນຫາເດັກ ສາມາດພົບເຫັນໃນຊຸດເຄື່ອງມືນີ້ ກ່ຽວກັບການນຳເອົາເດັກທຸກຄົນເຂົ້າ ໂຮງຮຽນ ແລະ ຮຽນຮູ້.

3.4 ເຊື່ອມໂຍງຊຸມຊົນບໍລິຫານຄຸ້ມຄອງໂຮງຮຽນກັບການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ສະມາຄົມພໍ່ແມ່ນັກຮຽນ ຫຼື ຊຸມຊົນບໍລິຫານຄຸ້ມຄອງໂຮງຮຽນ ແມ່ນແນວທາງຂອງການຊັກຈູງຜູ້ປົກຄອງເຂົ້າມີສ່ວນຮ່ວມ ໃນການພົວພັນໄລຍະຍາວກັບໂຮງຮຽນ. ພວກເຂົາຊ່ວຍສະໜອງການຕິດຕາມດູແລ ພື້ນທີ່ໃນໂຮງຮຽນລວມທັງການພັດທະນາຄຸນນະພາບ ແລະ ຄວາມຮັບຜິດຊອບ.

3.5 ລົງຢ້ຽມຢາມຄອບຄົວ

ການຕິດຕໍ່ພົວພັນກັບຄອບຄົວ ທີ່ມີເດັກໂດຍປົກກະຕິຖືກປະປ່ອຍບໍ່ແມ່ນເລື່ອງງ່າຍ. ວິທີໜຶ່ງເພື່ອສະໜອງຂໍ້ມູນຄວາມຮູ້ ກ່ຽວກັບການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ກໍຄື ໂຮງຮຽນຈະຕ້ອງຂໍຮ້ອງບາງຄົນຈາກກຸ່ມທີ່ຖືກປະປ່ອຍຕະຫຼອດມາ ເຊັ່ນ ຄົນພິການ ຫຼື ຄົນຊົນເຜົ່າ ເພື່ອຈະເປັນຄົນທີ່ຕ້ອງເຂົ້າເຖິງສຳລັບໂຮງຮຽນ. ການປະຊຸມກຸ່ມກັບບຸກຄົນດັ່ງກ່າວ ຫຼື ການໄປຢ້ຽມຢາມທີ່ຄອບຄົວສາມາດມີຜົນດີ ໃນການອະທິບາຍ ວິທີການສ້າງສະພາບແວດລ້ອມ ທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ຂອງໂຮງຮຽນ.

ຄຳຖາມ:

1. ຈຸດປະສົງຂອງການຕິດຕໍ່ພົວພັນກັບຄອບຄົວແລະຊຸມຊົນຂອງນັກຮຽນມີຫຍັງແດ່ ?
2. ແນວທາງທີ່ມີປະສິດທິພາບໃນການສື່ສານກັບຄອບຄົວແລະຊຸມຊົນມີຫຍັງແດ່ ?
   - ໃນນັ້ນທ່ານຄິດວ່າວິທີການໃດທີ່ສຳຄັນກວ່າໝູ່ ?
3. ມີຍຸດທະສາດໃດແດ່ທີ່ທ່ານຈະນຳໃຊ້ເພື່ອໃຫ້ຂໍ້ມູນແກ່ຜູ້ປົກຄອງແລະຊຸມຊົນເພື່ອ ອະທິບາຍ ສຮພຮ?

ບົດທີ 6: ຊຸມຊົນ ແລະ ຫຼັກສູດ

I. ຊຸມຊົນກັບຫ້ອງຮຽນ ແລະ ຫ້ອງຮຽນກັບຊຸມຊົນ

1. ຊຸມຊົນກັບຫ້ອງຮຽນ

ການປະກອບສ່ວນຕົວຈິງຂອງຜູ້ປົກຄອງ ແລະ ຊຸມຊົນມີຄວາມສຳຄັນ ສຳລັບການພັດທະນາສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ການປະກອບສ່ວນດ້ານການເງິນ ຫຼື ວັດຖຸສິ່ງຂອງຕ່າງໆ ແມ່ນແນວທາງທີ່ເປັນຮູບປະທຳ ທີ່ຜູ້ປົກຄອງສາມາດສະໜັບສະໜູນການຮຽນຮູ້ຂອງເດັກ. ຕົວຢ່າງ: ການຈັດຕັ້ງຊຸມຊົນ, ສະມາຄົມພໍ່ແມ່ນັກຮຽນ ແລະ ຄະນະກຳມະການຄຸ້ມຄອງບໍລິຫານໂຮງຮຽນ ຈະມີສ່ວນກ່ຽວຂ້ອງໃນການຊ່ວຍເຫຼືອ ເພື່ອປັບປຸງອາຄານສະຖານທີ່ ແລະ ເອື້ອອຳນວຍຄວາມສະດວກຕ່າງໆ. ນີ້ເປັນສິ່ງສຳຄັນ, ໂດຍສະເພາະ ສຳລັບໂຮງຮຽນທີ່ມີອຸປະສັກ ທີ່ກີດກັນເດັກພິການທາງຮ່າງກາຍເຂົ້າໄປໃນອາຄານ. ຖ້າມີຂັ້ນໄດ, ສະມາຊິກຊຸມຊົນກໍສາມາດຊ່ວຍເຮັດທາງລາດຂັ້ນໃດໃຫ້. ໃນຫຼາຍໆ ປະເທດການຈັດຕັ້ງຊຸມຊົນກໍມີຄວາມຫ້າວຫັນໃນການປັບປຸງນ້ຳສະອາດ ແລະ ການອະນາໄມໂຮງຮຽນ (ເຊັ່ນ-ວິດຖ່າຍ) ອີກດ້ວຍ. ຖ້າບໍ່ມີຫ້ອງນ້ຳທີ່ ແຍກ ຍິງ-ຊາຍ ຊຸມຊົນເຂົາເຈົ້າກໍຊ່ວຍສ້າງໃຫ້.

ຕົວຢ່າງ ບາງຊຸມຊົນຂອງປະເທດຕ່າງໆທີ່ມີການຊ່ວຍເຫຼືອ:

- ພໍ່ແມ່ຜູ້ປົກຄອງໃນປະເທດມາລາວີ ໄດ້ຮຽນຮູ້ວ່າຄູບໍ່ມີສະຖານທີ່ເກັບມ້ຽນອຸປະກອນການຮຽນການສອນທີ່ເຂົາເຈົ້າໄດ້ພັດທະນາຂຶ້ນ ເພື່ອຊຸກຍູ້ສິ່ງເສີມການມີສ່ວນຮ່ວມຂອງນັກຮຽນໃນການຮຽນຮູ້, ດັ່ງນັ້ນ ຊຸມຊົນຈຶ່ງໄດ້ຊື້ປະຕູຫ້ອງຮຽນ ແລະ ປະຕູຫ້ອງການຜູ້ອຳນວຍການ. ນອກຈາກ ຜູ້ປົກຄອງຈາກຊຸມຊົນດັ່ງກ່າວຍັງມີອີກ 20 ຊຸມຊົນ ຈາກທີ່ອື່ນໃນເມືອງດຽວກັນ ໄດ້ເລີ້ມຈັດຫາກ່ອງ/ແກັດເກົ່າໆ, ເກີບຢາງ, ແລະ ວັດສະດຸອື່ນໆ ໃຫ້ຄູສຳລັບເຮັດສື່ອຸປະກອນການຮຽນ-ການ ສອນ ເພື່ອໃຊ້ໃນການສອນນັກຮຽນໃນການອ່ານ, ການຂຽນເປັນ ແລະ ການຄຳນວນ. ຄູຜູ້ໜຶ່ງໄດ້ໃຫ້ຂໍ້ສັງເກດວ່າປະສົບການ ຂອງການເຂົ້າມີສ່ວນຮ່ວມຂອງຜູ້ປົກຄອງກັບໂຮງຮຽນໃນລະດັບຂອງຫຼັກສູດໄດ້ປະກອບສ່ວນຊ່ວຍເພີ້ມທະວີຜົນສຳເລັດ ແລະ ຄວາມສຳເລັດໃນການຮຽນຮູ້ຂອງ ນັກຮຽນທີ່ໂຮງຮຽນ.

  Miske SJ. (2003) Proud Pioneers: Improving Teaching and Learning in Malawi through Continuous Assessment. Washington, DC: American Institute for Research.

- ທີ່ປະເທດຟີລິບປິນ,ນັກການສຶກສາຜູ້ໜຶ່ງໄດ້ລາຍງານວ່າ: ພວກເຂົາໄດ້ໃຊ້ຄວາມພະຍາຍາມຫຼາຍທີ່ສຸດ ເພື່ອເຮັດໃຫ້ພໍ່ແມ່ຜູ້ປົກຄອງ ມີຄວາມຮູ້ສຶກວ່າ ເຂົາເປັນສ່ວນໜຶ່ງຂອງໂຮງຮຽນ ແລະ ເຮັດໃຫ້ນັກຮຽນຮູ້ສຶກວ່າເປັນສ່ວນໜຶ່ງຂອງຊຸມຊົນ. ຜູ້ປົກຄອງໄດ້ຊ່ວຍສ້າງສູນຊັບ

ພະຍາກອນ ເຊິ່ງເປັນເຮືອນຂອງຫ້ອງສະໝຸດ, ໂດຍອົງການອຸຍນິເຊັບໄດ້ບໍລິຈາກປຶ້ມ 100 ຫົວ ໃນຂະນະທີ່ຄູ ແລະ ນັກ ຮຽນເປັນຜູ້ຜະລິດສື່ການຮຽນ-ການສອນ ຫຼື ຮັບບໍລິຈາກ ໂດຍ ອົງກອນມູນນິທິຕ່າງໆ. ພ້ອມກັນນັ້ນ ນັກຮຽນຍັງໄດ້ຊ່ວຍສ້າງເຟີນີເຈີ ແລະ ເຄື່ອງຕົບແຕ່ງ ເພີ້ມເຕີມຕ່າງໆ ເຊັ່ນ: ຖ້ານປຶ້ມສຳລັບສູນຊັບ ພະຍາກອນ.

Feny de los Angelss-Bautista with Marissa J. Pasual, Marjorie S. Javier, Lillian Mercado-Carreon and Cristina H. Abad. (2001). Reinventing Philippine Education: Building Schools Filipino Children Deserve. The Ford Foundation, Manila.

ພວກເຮົາໄດ້ສັງເກດເຫັນ ໃນເຄື່ອງມືທີ່ຜ່ານມາແລ້ວວ່າ: ວິທີໜຶ່ງທີ່ຈະດຶງເອົາພໍ່ແມ່ຜູ້ປົກຄອງເຂົ້າ ມາມີສ່ວນຮ່ວມ ໂດຍກົງໂດຍມີການເຊື້ອເຊີນພວກເຂົາເຈົ້າມາຢ້ຽມຢາມຫ້ອງຮຽນ. ມີຫຼາຍແນວທາງ ເຊິ່ງ ພໍ່ແມ່, ພໍ່ເຖົ້າ, ແມ່ເຖົ້າ ແລະ ຜູ້ປົກຄອງສາມາດມີສ່ວນກ່ຽວຂ້ອງ ໃນການສຶກສາຂອງລູກຫຼານ ທີ່ຈະປະ ກອບສ່ວນຊ່ວຍປັບປຸງທຳມະຊາດຂອງ ສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້ຂອງຫ້ອງຮຽນ.ຕໍ່ໄປນີ້ແມ່ນແນວຄວາມຄິດບາງຢ່າງຂອງການມີສ່ວນຮ່ວມຈາກຊຸມຊົນ.

- ພໍ່ແມ່ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວສາມາດເປັນອາສາສະໝັກ ເພື່ອຊ່ວຍຄູເຮັດກິດຈະ ກຳຫ້ອງຮຽນ ເຊັ່ນ: ການອ່ານແລະການກະກຽມສື່ການຮຽນການສອນ, ຊ່ວຍກິດຈະກຳນອກ ຫຼັກສູດ (ກິລາ ຫຼື ການທັດສະນະສຶກສາພາກສະໜາມ, ຫຼື ການຈັດກິດຈະກຳພິເສດ ເຊັ່ນ: ການຈັດງານສະຫລອງ ຫຼື ງານບຸນຕ່າງໆ)
- ພໍ່ແມ່ຜູ້ປົກຄອງສາມາດເປັນແຂກຮັບເຊີນ ມາບັນຍາຍຄວາມຮູ້ເພື່ອແລກປ່ຽນຂໍ້ມູນ, ຄວາມ ຮູ້ກ່ຽວກັບປະສົບການທີ່ໄດ້ປະຕິບັດຜ່ານມາ ກ່ຽວກັບວຽກງານທີ່ເຂົາເຈົ້າໄດ້ປະຕິບັດຜ່ານມາ. ພວກເຂົາສາມາດທີ່ຈະສົນທະນາ ກ່ຽວກັບວິທີທີ່ການສຶກສາປະກອບສ່ວນຊ່ວຍ ໃນການເປັນ ຊ່ຽວຊານ ໃນວຽກທີ່ເຂົາເຈົ້າໄດ້ເຮັດ. ຜູ້ປົກຄອງທີ່ກົກໜັງສືກໍສາມາດສົນທະນາ ກ່ຽວກັບປະ ຫວັດຂອງຊຸມຊົນ, ແລກປ່ຽນນິທານພື້ນເມືອງ ຫຼື ສາທິດວິທີເຮັດເຄື່ອງຫັດຖະກຳແບບດັ້ງເດີມ.
- ພວກເຂົາສາມາດເຂົ້າມີສ່ວນຮ່ວມ ແລະ ເຂົ້າຮ່ວມກອງປະຊຸມສະມາຄົມພໍ່ແມ່ນັກຮຽນ ແລະ ກອງປະຊຸມອື່ນໆຂອງໂຮງຮຽນ ເພື່ອໄດ້ຮັບຊາບຂໍ້ມູນຂ່າວສານ ລວມທັງ ການເຂົ້າຮ່ວມງານ ພິເສດຕ່າງໆຂອງຫ້ອງຮຽນ. ພວກເຂົາສາມາດພົບປະກັບຄູ, ຮຽນຮູ້ກ່ຽວກັບຫຼັກສູດຂອງໂຮງ ຮຽນ ແລະ ວິທີທີ່ຈະເຂົ້າມາມີສ່ວນຮ່ວມໃນກິດຈະກຳຕ່າງໆ.
- ພວກເຂົາສາມາດທີ່ຈະບໍລິຈາກວັດຖຸອຸປະກອນຕ່າງໆ ໃຫ້ແກ່ໂຮງຮຽນ ຫຼື ຊ່ວຍຊອກຫາທຶນ ຮອນມາປະກອບ ສ່ວນສະໜອງຄວາມຕ້ອງການຂອງໂຮງຮຽນ ແລະ ຫ້ອງຮຽນ.
- ພວກເຂົາສາມາດທີ່ຈະເຂົ້າເຖິງພໍ່ແມ່ຜູ້ປົກຄອງຄົນອື່ນໆ ຜູ້ທີ່ລູກຫຼານບໍ່ໄດ້ເຂົ້າໂຮງຮຽນ ຫຼື ຄິດ ວ່າ ລູກຫຼານຂອງເຂົາເຈົ້າກຳລັງຈະປະລະ ເພື່ອຊຸກຍູ້ສິ່ງເສີມເຂົາເຈົ້າ ໃຫ້ຮຽນຈົນສຳເລັດ.

- ♦ ພວກເຂົາສາມາດທີ່ຈະເຂົ້າຮ່ວມເພື່ອພະຍາຍາມຮັກສາໂຮງຮຽນຂອງເດັກ ຫຼື ສູນດູແລສຸຂະພາບເດັກ ໃຫ້ປອດໄພ ແລະ ສະອາດ.
- ♦ ພວກເຂົາສາມາດທີ່ຈະຈັດງານວັນເຂົ້າຊົມໂຮງຮຽນ. ໃນວັນນັ້ນ, ຜູ້ປົກຄອງ, ສະມາຊິກຊຸມຊົນ ແລະ ພະນັກງານຕ່າງໆ ຈະຖືກເຊີນເຂົ້າໄປຮ່ວມທີ່ໂຮງຮຽນ. ຜົນງານທີ່ເປັນຕົວແທນຈາກເດັກ ນັກຮຽນທຸກຄົນຈະຖືກວາງສະແດງຄຽງຄູ່ກັບ ສື່-ອຸປະກອນການສອນອັນໃໝ່; ຄູຈະສາທິດ ທັກສະໃໝ່ ໃນການປະເມີນຜົນ, ການສິດສອນ. ພ້ອມທັງເດັກທີ່ມີຄວາມສາມາດ ແລະ ພື້ນຖານແຕກຕ່າງກັນ ກໍສະແດງ ສາທິດ ສິ່ງທີ່ພວກເຂົາໄດ້ຮຽນຮູ້ມາ.
- ♦ ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນສາມາດທີ່ຈະຊ່ວຍປະເມີນຜົນສຳເລັດ ການຮຽນຮູ້ຂອງເດັກ. ພວກເຂົາສາມາດຈະໃຫ້ຄະແນນວຽກບ້ານຂອງນັກຮຽນ, ໝາຍຄວາມວ່າມີສ່ວນຮ່ວມໃນການຮຽນຮູ້ຂອງເດັກ.
- ♦ ນັກຮຽນທີ່ສຳເລັດການສຶກສາ ແລະ ພໍ່ແມ່ຜູ້ປົກຄອງທີ່ທຸ້ມເທສິ່ງຕ່າງໆ ໃຫ້ແກ່ເດັກເຊິ່ງສາມາດເປັນແບບຢ່າງທີ່ດີ ໂດຍສະເພາະ ຜູ້ປົກຄອງທີ່ລູກຫຼານເຊິ່ງມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ. ໃຫ້ຈັດງານວັນອາຊີບທຸກໆປີ. ໂດຍເຊື້ອເຊີນຜູ້ຍິງ ແລະ ຜູ້ຊາຍເຫຼົ່ານີ້ ມາສົນທະນາອະພິປາຍ ພ້ອມທັງເດັກຍິງ-ເດັກຊາຍ ຈະສາມາດກຽມຕົວ ເພື່ອງານອາຊີບໄດ້.

2 ຫ້ອງຮຽນກັບຊຸມຊົນ

ຄຽງຄູ່ກັບການເຊື້ອເຊີນຜູ້ປົກຄອງ ແລະ ສະມາຊິກຊຸມຊົນມາຢ້ຽມຢາມໂຮງຮຽນແລ້ວ, ຫຼັກສູດທີ່ສອດຄ່ອງ ກໍຮຽກຮ້ອງຕ້ອງການ ໃຫ້ເດັກໃນຊຸມຊົນຮຽນຮູ້ຫຼາຍຫົວຂໍ້ ເທົ່າທີ່ເຂົາເຈົ້າສາມາດປະຕິບັດໄດ້. ຕົວຢ່າງ:

- ♦ ເດັກສາມາດຊອກຫາຫົວຂໍ້ບົດຄວາມຕ່າງໆ ຫຼື ຫາຂໍ້ມູນຄວາມຮູ້ຈາກຄອບຄົວຂອງເຂົາ ຫຼື ຈາກຊຸມຊົນທີ່ມັນກ່ຽວພັນກັບບົດຮຽນທີ່ຮຽນຢູ່ໂຮງຮຽນ.
- ♦ ເດັກສາມາດສຳພາດພໍ່ແມ່ ຜູ້ປົກຄອງ ຫຼື ພໍ່ເຖົ້າ,ແມ່ເຖົ້າ ກ່ຽວກັບ ໄວເດັກຂອງພວກເພິ່ນ.
- ♦ ພວກເຂົາສາມາດຊອກຫາຕົ້ນໄມ້ ຫຼື ວັດຖຸປະກອນອື່ນໆ ທີ່ກ່ຽວຂ້ອງກັບບົດຮຽນ.
- ♦ ພວກເຂົາສາມາດນຳເອົາວັດຖຸປະກອນ (ເຊັ່ນ: ເຈ້ຍແຂງທີ່ໃຊ້ແລ້ວ) ເຊິ່ງຄູສາມາດທີ່ຈະໃຊ້ເຮັດ ເປັນສື່ການຮຽນການສອນ.
- ♦ ເດັກສາມາດເຂົ້າຮ່ວມໃນການອອກແບບຈັດຫ້ອງຮຽນຄືນໃໝ່ ຫຼື ໃນການປະເມີນ ຫຼື ການປັບປຸງພື້ນຫ້ອງຮຽນ ເພື່ອໃຫ້ພວກເຂົາມີຄວາມ “ເປັນມິດໃນການຮຽນຮູ້” ຫຼາຍຂຶ້ນ (ໂດຍສະເພາະເພື່ອເດັກທີ່ມີຄວາມເປັນພິການ), ມີຄວາມປອດໄພ (ຫຼຸດຜ່ອນຄວາມຂັດແຍ່ງ) ແລະ ມີຄວາມລະອຽດອ່ອນຕໍ່ບົດບາດຍິງ-ຊາຍ. ການປັບປຸງພື້ນຫ້ອງຮຽນ ຍັງສາມາດນຳໄປສູ່ການມີພື້ນທີ່ຫວ່າງນອກຫ້ອງຮຽນ ອີກດ້ວຍ.

- ♦ ເດັກສາມາດເຮັດແຜນທີ່ຊຸມຊົນ ແລະ ຊ່ວຍໃນການຊອກຫາເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ເຊິ່ງເຂົາເຈົ້າຄວນຈະໄດ້ເຂົ້າຮຽນ.
- ♦ ເດັກສາມາດເຂົ້າຮ່ວມ ໃນກິດຈະກຳບໍລິການຕ່າງໆຂອງສັງຄົມ. ຢູ່ໃນໂຄງການເດັກເຊັ່ນ: ທີ່ ປະເທດໄທ, ໂດຍປົກກະຕິເດັກໄດ້ອາສາສະໝັກທຳຄວາມສະອາດເຮືອນພັກຂອງຄົນຊະລາ ທີ່ຢູ່ໂດດດ່ຽວ. ໃນຕອນແລງຂອງແຕ່ລະວັນ, ພວກເຂົາກໍໄດ້ຮ່ວມຮັບປະທານອາຫານກັນ ແລະ ຄົນຊະລາ ກໍເລົ່າເລື່ອງລາວ ກ່ຽວກັບປະຫວັດ ແລະ ວັດທະນະທຳຂອງຊຸມຊົນໃຫ້ຟັງ. ເຖິງຈະມີຄວາມແຕກຕ່າງ ໃນໄວອາຍຸ, ແຕ່ລະຄົນກໍໄດ້ພັດທະນາ ຄວາມສຳພັນທີ່ໃກ້ຊິດ ແລະ ປະຕິບັດການດູແລທີ່ດີຂຶ້ນ. ນອກຈາກນີ້, ເດັກນັກຮຽນຍັງເຮັດວຽກ ເພື່ອຮັກສາຖະໜົນຫົນທາງໃນຊຸມຊົນສະອາດ ເພື່ອ ຫຼີກລ້ຽງ ອຸບັດຕິເຫດ.

➢ ກິດຈະກຳຕ່າງໆໃນຫ້ອງຮຽນທີ່ມຸ້ງຄວາມສົນໃຈໄປຍັງຊຸມຊົນ.

ມີຫຼາຍວິທີທີ່ນັກຮຽນສາມາດທີ່ຈະຮຽນຈາກຊຸມຊົນຂອງເຂົາ ແລະ ແລກປ່ຽນຢູ່ໃນກິດຈະກຳຊຸມຊົນ ຂອງເຂົາ. ຕົວຢ່າງ: ຢູ່ພາກເໜືອຂອງໄທກຸ່ມນັກຮຽນຫ້ອງ ປ.5 ໄດ້ສຶກສາກ່ຽວກັບສະພາບແວດລ້ອມ ຂອງຊຸມຊົນ ສຳລັບບົດຮຽນວິທະຍາສາດໃນລະຫວ່າງປີຮຽນ. ພວກເຂົາໄດ້ເຮັດເປັນເອກະສານ ກ່ຽວ ກັບຮ່ອງຮອຍຂອງການທຳລາຍປ່າໄມ້ ແລະ ໄດ້ສຳພາດສະມາຊິກຊຸມຊົນ ກ່ຽວກັບປະຫວັດຂອງ ປ່າໄມ້ໃນຊຸມຊົນ. ເຂົາຍັງໄດ້ສົນທະນາອະພິປາຍເຖິງແນວທາງຕ່າງໆຂອງການປູກຕົ້ນໄມ້ ໃນຊຸມ ຊົນ. ໃນເວລາທ້າຍປີ, ນັກຮຽນໄດ້ ນຳສະເໜີຜົນຂອງການສຶກສາຂອງເຂົາຕໍ່ພໍ່ແມ່ຜູ້ປົກຄອງທັງໝົດ. ພໍ່ແມ່ຜູ້ປົກຄອງເຫຼົ່ານີ້ທີ່ຈິງ ແລ້ວໄດ້ຮຽນຮູ້ ກ່ຽວກັບຊຸມຊົນຈາກນັກຮຽນພວກເຂົາມີຄວາມປະທັບໃຈ ກັບສິ່ງທີ່ນັກຮຽນໄດ້ຮຽນຮູ້ ແລະ ວິທີທີ່ນັກຮຽນນຳສະເໜີຂໍ້ມູນ. ຜູ້ປົກຄອງ ແລະ ນັກຮຽນ ໄດ້ຮ່ວມ ກັນຊອກຫາທາງອອກເພື່ອແກ້ໄຂບັນຫາ ສະພາບແວດລ້ອມ ໃນຊຸມຊົນຂອງເຂົາ.

➢ ການເຂົ້າຮ່ວມປະຊຸມຂອງນັກຮຽນ.

ນັກຮຽນຍັງສາມາດຈະຫາປະສົບການຈາກຂໍ້ເທັດຈິງໂດຍການມາເຂົ້າຮ່ວມກອງປະຊຸມຂອງໂຮງຮຽນ -ຜູ້ປົກຄອງ, ກອງປະຊຸມຂອງຊຸມຊົນຫຼືເຂົ້າຮ່ວມໃນງານຕ່າງໆທາງສັງຄົມ. ທ່ານສາມາດຈັດການ ຫຼີ້ນບົດບາດສົມມຸດກອງປະຊຸມລ່ວງໜ້າ ເພື່ອເຝິກຝົນກ່ອນທີ່ເຂົາຈະເຂົ້າຮ່ວມ ແລະ ວິທີການທີ່ຄວນ ປະຕິບັດຄືແນວໃດ. ນັກຮຽນສາມາດທີ່ຈະຈັດກິດຈະກຳ ແລະ ໂຄງການຕ່າງໆ ຈາກບົດຮຽນໃນຫ້ອງ ຮຽນຂອງເຂົາເຈົ້າ ແລະ ສະແດງຜົນງານໃຫ້ເຫັນ ໃນງານຈັດສະແດງຂອງນັກຮຽນ, ຫຼື ກຸ່ມຍ່ອຍ ຂອງ ນັກຮຽນສາມາດທີ່ຈະນຳສະ ເໜີການຫຼີ້ນລະຄອນ, ຮ້ອງເພງ ຫຼື ເລົ່າບົດກອນ ເຊິ່ງຢູ່ໃນກິດຈະກຳດັ່ງ ກ່າວນີ້, ນັກຮຽນຈະອະທິບາຍສູ່ພໍ່ແມ່ ຜູ້ປົກຄອງໄດ້ຮັບຊາບສິ່ງທີ່ເຂົາພວມຮຽນຮູ້ຢູ່. ສິ່ງດັ່ງກ່າວຈະ ເປັນການປັບປຸງການສື່ສານລະຫວ່າງໂຮງຮຽນ ແລະ ຜູ້ປົກຄອງ, ແລະ ມັນຈະເປັນກຳລັງໜູນ ໃຫ້ແກ່

ສິ່ງທີ່ເດັກໄດ້ຮຽນຮູ້. ໃນການກະກຽມກອງປະຊຸມ ໂຮງຮຽນ-ຜູ້ປົກຄອງ ກ່ຽວກັບການຮ່ຳຮຽນຂອງເດັກ, ທ່ານຈຳເປັນຕ້ອງເອົາໃຈໃສ່ພິເສດວ່າຈະໃຊ້ພາສາໃດ ໃນກອງປະຊຸມ. ນັກຮຽນ ແລະ ຄູ ຈຳເປັນຕ້ອງ ຕົກລົງວິທີທີ່ຈະສື່ສານ ກັບຜູ້ປົກຄອງຜູ້ທີ່ມີບັນຫາ ກ່ຽວກັບການໄດ້ຍິນ, ໄດ້ອ່ານ ເພື່ອໃຫ້ເຂົາເຈົ້າ ເຂົ້າໃຈກ່ຽວກັບການສົນທະນາ.

ຕົວແບບຂອງບົດບາດແມ່ຍິງ

ໃນໂຮງຮຽນທີ່ບໍ່ມີຄູຜູ້ຍິງ, ແມ່ຍິງຈາກຊຸມຊົນສາມາດທີ່ຈະເຂົ້າມີສ່ວນກ່ຽວຂ້ອງໃນໂຄງການບົດບາດ ທີ່ເປັນຕົວແບບ. ຜູ້ປົກຄອງ ຫຼື ຍາດພີ່ນ້ອງຂອງນັກຮຽນລວມທັງຜູ້ທີ່ມີຊື່ສຽງ ໃນທາງສາສະໜາ, ສິລະປະ, ກິລາ ຫຼື ນັກການເມືອງຈາກຊຸມຊົນເຊິ່ງໂດຍປົກກະຕິ ຈະເຕັມໃຈທີ່ຈະເຂົ້າມີສ່ວນຮ່ວມ ໃນໂຮງຮຽນ ຫຼື ຫ້ອງຮຽນ ທີ່ພະຍາຍາມ ຈະໃຫ້ເປັນຕົວແບບ ຫຼື ແບບຢ່າງຂອງຜູ້ຍິງທີ່ດີ.

ຖ້າມີແມ່ຍິງໃນທ້ອງຖິ່ນທີ່ຈະເຮັດສິ່ງດັ່ງກ່າວ, ໃຫ້ເຊີນພວກເຂົາເຈົ້າມາໂຮງຮຽນຫຼາຍໆຄັ້ງ ຕໍ່ສົກຮຽນ ເພື່ອ ຂໍໃຫ້ພວກເພີ່ນໄດ້ກ່າວເຖິງວິທີເຮັດວຽກຮ່ວມກັນລະຫວ່າງເພດຊາຍ ແລະ ເພດຍິງ; ແລະ ບົດບາດຍິງ-ຊາຍ ໄດ້ມີຜົນກະທົບຕໍ່ທາງເລືອກ, ຄວາມສຳເລັດ ແລະ ຄວາມຫຼົ້ມເຫຼວຂອງເຂົາເຈົ້າ. ນອກຈາກຈະໃຫ້ກ່າວ ຄຳປາໄສ/ບັນຍາຍແລ້ວ, ການສາທິດຜົນງານ ແລະ ການໃຫ້ຄຳປຶກສາແນະນຳ ເດັກເປັນລາຍບຸກຄົນ ກໍສາມາດ ທີ່ຈະຊ່ວຍແນະທິດທາງ ແລະ ໃຫ້ຄຳຄິດເຫັນ ກ່ຽວກັບບົດບາດ ສົມມຸດກັບເດັກນັກຮຽນ. ຄວນຈັດໃຫ້ມີຄູຜູ້ຍິງ ແລະ ກຸ່ມເດັກນັກຮຽນຍິງຜູ້ທີ່ຮຽນຈົບຊັ້ນປະຖົມ ຫຼື ຊັ້ນ ມັດທະຍົມໄປຢ້ຽມຢາມໂຮງຮຽນຊົນນະບົດ ບ່ອນທີ່ມັກມີເດັກຍິງປະລະການຮຽນ ກ່ອນຮຽນຈົບປະຖົມ. ເດັກຍິງທັງໝົດຄວນປະຊຸມຮ່ວມກັນ ເພື່ອສົນທະນາສິ່ງທີ່ເດັກຕ້ອງການທີ່ຈະເຮັດ ເພື່ອໃຫ້ໄດ້ ເຂົ້າຮຽນ ແລະ ຮຽນໃຫ້ໄດ້ດີ. ຄວນຈັດໃຫ້ຄູຜູ້ຍິງ ທີ່ມາຢ້ຽມຢາມ ແລະ ເດັກຍິງລຸ້ນໃຫຍ່ມາຮ່ວມປະ ຊຸມດ້ວຍກັນກັບເດັກຍິງ ແລະ ຜູ້ປົກຄອງ ເພື່ອສົນທະນາອະພິປາຍແນວທາງສະເພາະ ເພື່ອຊ່ວຍ ເດັກຍິງ ໃຫ້ໄດ້ຮຽນຈົນຈົບການສຶກສາ.

The Gender-Fair Teacher (2003) UNICEF/Eritrea

ຄຳຖາມ :

1. ການດຶງເອົາພໍ່ແມ່ຜູ້ປົກຄອງເຂົ້າມາມີສ່ວນຮ່ວມມີຜົນປະໂຫຍດແນວໃດຕໍ່ການສ້າງ ສຮພຮ ?
2. ຕົວແບບຂອງບົດບາດແມ່ຍິງເປັນສິ່ງກະຕຸກຊຸກຍູ້ສິ່ງເສີມຕໍ່ກັບການສ້າງ ສຮພຮ ແນວໃດ?

ພາກທີ III : ການນຳເອົາເດັກທຸກຄົນເຂົ້າໂຮງຮຽນ ແລະການຮຽນຮູ້

ບົດທີ 7 : ປະເພດເດັກທີ່ບໍ່ໄດ້ເຂົ້າຮຽນ.

1. ບາງປະເພດຂອງເດັກທີ່ມີບັນຫາບໍ່ໄດ້ເຂົ້າຮຽນ.

- ເດັກຊົນເຜົ່າທີ່ບໍ່ເຂົ້າໃຈບົດຮຽນ ຫຼື ປຶ້ມແບບຮຽນທີ່ເປັນພາສາລາວ ;
- ເດັກຜູ້ທີ່ບໍ່ເຄີຍຖືກຮຽກຮ້ອງໃຫ້ເຂົ້າຮ່ວມໃນກິດຈະກຳ ;
- ເດັກທີ່ບໍ່ເຄີຍມີສ່ວນຮ່ວມໃນການຮຽນ ;
- ເດັກທີ່ເບິ່ງກະດານ ຫຼື ປຶ້ມແບບຮຽນບໍ່ເຫັນ ຫຼື ບໍ່ໄດ້ຍິນຄູເວົ້າ .
- ເດັກທີ່ຮຽນອ່ອນ ແລະ ບໍ່ເຄີຍມີໃຜ ພະຍາຍາມຊ່ວຍເຫຼືອເຂົາເຈົ້າ.

ເດັກເຫຼົ່ານີ້ອາດຈະມັກນັ່ງຢູ່ດ້ານຫຼັງຂອງຫ້ອງຮຽນ ແລະ ບໍ່ດົນກໍອາດຈະອອກໂຮງຮຽນ. ໃນຖານະທີ່ເປັນຄູ ພວກເຮົາຄວນມີຄວາມຮັບຜິດຊອບ ໃນການສ້າງສະພາບແວດລ້ອມ ໃນການຮຽນຮູ້ໃຫ້ເດັກທຸກຄົນສາມາດຮ່ຳຮຽນໄດ້, ເຮັດໃຫ້ເດັກທຸກຄົນຢາກຮຽນ ແລະ ເຮັດໃຫ້ເດັກທຸກຄົນຮູ້ສຶກວ່າ ພວກເຂົາຖືກບັນຈຸຢູ່ໃນຫ້ອງຮຽນ ແລະ ໂຮງຮຽນຂອງພວກເຮົາ.

2. ການຊອກຮູ້ອຸປະສັກທີ່ກີດຂວາງການຮຽນຮ່ວມ :

ກໍລະນີສຶກສາ

ຈົ່ງອ່ານກໍລະນີສຶກສາດັ່ງຕໍ່ໄປນີ້

“ທິບ” ມີອາຍຸ 12 ປີ. ທຸກໆເຊົ້າ, ບໍ່ວ່າຈະເປັນລະດູຮ້ອນທີ່ແຜດເຜົາ ຫຼື ລະດູໜາວທີ່ໜາວກະດ້າງ, ທິບ ຈະຍ່າງເລາະອ້ອມຊຸມຊົນ ເພື່ອພະຍາຍາມຫາລາຍໄດ້ລ້ຽງຊີບ ແລະເກັບທ້ອນເງິນເລັກໆນ້ອຍໆ. ບາງຄັ້ງ, ທິບຈະຊ່ວຍມ້ຽນມັດ ແລະ ທຳຄວາມສະອາດຮ້ານຂາຍເຄື່ອງແຫ້ງຂອງຊຸມຊົນ, ຫຼື ລ້າງຖ້ວຍຊາມທີ່ຮ້ານຂາຍເຝີ ທີ່ຕັ້ງຢູ່ໃກ້ຄຽງ. ຖ້າບໍ່ມີຫຍັງເຮັດ, ທິບກໍຈະຊອກເກັບແກ້ວ ແລະ ກະປ໋ອງເປົ່າ ເພື່ອຂາຍໃຫ້ສູນເກັບຊື້ຂອງເສດຢູ່ຂ້າງຖະໜົນ. ລາຍໄດ້ຂອງທິບມື້ໃດໂຊກດີ, ທິບອາດຈະຫາເງິນໄດ້ ປະມານ 10.000- 15.000 ກີບ; ຖ້າມື້ໃດໂຊກບໍ່ດີກໍຈະຫາໄດ້ບໍ່ເກີນ 5.000 ກີບ. ທິບເຄີຍໄປໂຮງຮຽນ, ແຕ່ດຽວນີ້ທິບຕ້ອງການຫາເງິນຫຼາຍກວ່າທີ່ຈະໄປຮຽນ.

ກິດຈະກຳເພື່ອປະຕິບັດ: ການກຳນົດ/ລະບຸອຸປະສັກຕໍ່ການຮຽນຮ່ວມ

ຖ້າທ່ານພວມເຮັດວຽກກັບເພື່ອນຂອງທ່ານ, ໃຫ້ຈັດຕັ້ງກັນເປັນ 2 ຫຼື 4 ກຸ່ມ. ຖ້າທ່ານເຮັດວຽກຕາມລຳພັງ, ໃຫ້ທົດລອງເຮັດກິດຈະກຳນີ້ດ້ວຍຕົວທ່ານເອງ.

- ທຳອິດ, ແຕ່ລະຄົນຄວນຄິດງຽບໆດ້ວຍຕົນເອງ ກ່ອນວ່າ ດ້ວຍເຫດຜົນໃດບາງທີ່ທີບບໍ່ໄປໂຮງຮຽນ. ຖ້າເປັນໄປໄດ້, ແຕ່ລະຄົນອາດບັນທຶກໄວ້. ຄວນໃຊ້ເວລາປະມານ 5 ນາທີ.
- ສະພາບແວດລ້ອມແຫ່ງການຮຽນຮູ້ຂອງເດັກປະກອບດ້ວຍໂຮງຮຽນ, ຄອບຄົວ ແລະ ຊຸມຊົນ. ພ້ອມນັ້ນ ມັນຍັງປະກອບດ້ວຍ "ຕົວເດັກເອງ", ນັ້ນກໍຄື ເດັກໂດຍສ່ວນຕົວແລ້ວ ຈະຢາກໄປໂຮງຮຽນ ຫຼືບໍ່. ຂັ້ນຕອນຕໍ່ໄປ ມອບໝາຍວຽກໃຫ້ແຕ່ລະກຸ່ມ ກຸ່ມລະໜຶ່ງ ສະພາບແວດລ້ອມແຫ່ງການຮຽນຮູ້. ກຸ່ມທີໜຶ່ງເປັນໂຮງຮຽນ, ກຸ່ມທີສອງເປັນຄອບຄົວ, ກຸ່ມທີສາມເປັນຊຸມຊົນ ແລະ ກຸ່ມທີສີ່ເປັນເດັກ(ທີບ). ຖ້າທ່ານເຮັດວຽກເປັນສອງກຸ່ມ, ແຕ່ລະກຸ່ມສາມາດເລືອກເອົາສອງສະພາບແວດລ້ອມແຫ່ງການຮຽນຮູ້. ຖ້າທ່ານເຮັດວຽກຄົນດຽວ, ໃຫ້ພະຍາຍາມເຮັດທັງໝົດທຸກສະພາບແວດລ້ອມ.
- ຢາຍເຈ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມ ແລ້ວບອກພວກເຂົາໃຫ້ຂຽນສະພາບແວດລ້ອມ ທີ່ເຂົ້າຄົ້ນຄວ້າໃສ່ຂ້າງເທິງຂອງເຈ້ຍແຜ່ນໃຫຍ່. ມັນຄວນເປັນໜຶ່ງສະພາບແວດລ້ອມ ສຳລັບເຈ້ຍແຜ່ນໃຫຍ່ແຕ່ລະແຜ່ນ.
- ໃຫ້ສົນທະນາໃນກຸ່ມຂອງທ່ານ, ອຸປະສັກໃດແດ່ ທີ່ອາດມີຢູ່ພາຍໃນສະພາບແວດລ້ອມຂອງການຮຽນຮູ້ທີ່ອາດເປັນສາເຫດໃຫ້ **(ທີບ)** ບໍ່ມາໂຮງຮຽນ. ໃຫ້ລຽງບັນດາອຸປະສັກຕ່າງໆ ໃສ່ເຈ້ຍແຜ່ນໃຫຍ່ ສຳລັບຫົວຂໍ້ສະພາບແວດລ້ອມແຫ່ງການຮຽນຮູ້ຂອງທ່ານ, ແລ້ວໃຫ້ອ່ານ ຫົວຂໍ້ດັ່ງຕໍ່ໄປນີ້ :

2.1 ບາງເຫດຜົນຂອງເດັກທີ່ບໍ່ໄດ້ມາໂຮງຮຽນທີບ (ເດັກ)

ເດັກຈະສາມາດມາໂຮງຮຽນ ຫຼື ອາດຈະຢາກມາໂຮງຮຽນ ຫຼື ບໍ່ ແມ່ນມີຜົນກະທົບບາງສ່ວນ ຈາກ ຄຸນລັກ ສະຂອງ ຕົວເດັກເອງ ຫຼື ສະພາບທີ່ເດັກເຫັນຕົວເອງວ່າເປັນຄືແນວໃດ.

ຍົກຕົວຢ່າງ: ແສງສະຫວ່າງທີ່ເຈີດຈ້າ ແລະຄວາມຫວັງທີ່ຈະຫາເງິນຄຳ ອາດເປັນສິ່ງກະຕຸກຊຸກຍູ້ເດັກໃຫ້ໜີອອກຈາກບ້ານໄປ ແລະ ຍ້າຍໄປຢູ່ໃນເມືອງໃຫຍ່ ແທນທີ່ຈະຮຽນໜັງສືຢູ່ໂຮງຮຽນ. ຢູ່ຂ້າງລຸ່ມນີ້ເປັນບາງເຫດຜົນທີ່ສຳຄັນທີ່ກ່ຽວຂ້ອງກັບ**ເດັກ** ເຊິ່ງອາດເປັນຜົນກະທົບທີ່ລາວຈະເຂົ້າໂຮງຮຽນ ຫຼືບໍ່.

ມີປັດໄຈທີ່ເດັກເປັນສູນກາງໃນຊຸມຊົນ, ໃນປະເທດ ຫຼື ວັດທະນະທຳຂອງທ່ານອັນໃດອີກບໍ່ທີ່ອາດເປັນຜົນກະທົບຕໍ່ການໄປ ຫຼືບໍ່ໄປໂຮງຮຽນຂອງເດັກ?

- **ການຂາດທີ່ຢູ່ອາໄສແລະຄວາມຈຳເປັນຕ້ອງເຮັດວຽກ**

  ພວກເຮົາເຫັນເດັກເຫຼົ່ານີ້ທຸກວັນ, ໂດຍສະເພາະ ຖ້າພວກເຮົາອາໄສຢູ່ໃນຕົວເມືອງ, ແຕ່ພວກເຮົາ ບໍ່ຄ່ອຍ ຈະສັງເກດນອກຈາກເດັກຂໍທານເງິນ ຫຼື ຂໍຮ້ອງໃນເລື່ອງອື່ນໆ. "ຖະໜົນ" ແມ່ນເຮືອນຂອງພວກເຂົາ ແລະ ເປັນແຫຼ່ງຫາລ້ຽງຊີວິດ. ມີເດັກຂ້າງຖະໜົນປະມານ 100

ລ້ານຄົນ ໃນທົ່ວໂລກ. ເດັກຂ້າງຖະໜົນອາດເປັນເດັກທີ່ເຮັດວຽກ, ໂດຍປົກກະຕິຈະເປັນເດັກທີ່ປະລະ ຫຼື ເປັນເດັກທີ່ຂາດທີ່ຢູ່ອາໄສ. ເດັກຂ້າງຖະໜົນມີຄວາມສ່ຽງສູງ ຕໍ່ການຖືກກີດຂີ່ຂູດຮີດ ເພາະວ່າພວກເຂົາຈະຂາດການຕິດຕໍ່ພົວພັນກັບຄອບຄົວ, ຊຸມຊົນ ແລະ ໂຮງຮຽນ ຂອງເຂົາ. ຢ່າງໃດກໍຕາມ, ບໍ່ແມ່ນເດັກຖະ ໜົນທຸກຄົນຈະບໍ່ມີຄອບຄົວ. ບາງຄົນຄືດັ່ງ (ທິບ) ອາດຈະເຮັດວຽກຢູ່ຕາມຖະໜົນ ເພື່ອຫາລາຍໄດ້ ແລ້ວກໍກັບຄືນສູ່ຄອບຄົວເວລາກາງຄືນ. ນີ້ອາດເປັນກໍລະນີສະ ເພາະສຳລັບເດັກທີ່ບໍ່ເຫັນຄຸນຄ່າ ຂອງການສຶກສາ, ຜູ້ທີ່ບໍ່ສົນໃຈໂຮງຮຽນ, ຜູ້ທີ່ມີອາຍຸແກ່ເກີນທີ່ຈະເຂົ້າຮຽນ ໃນລະບົບໂຮງຮຽນ, ຫຼື ຜູ້ທີ່ໄດ້ຮັບຜົນກະທົບ ຈາກ ຄວາມຂັດແຍ່ງທາງການເມືອງ ເຊິ່ງການມີຊີວິດຢູ່ມີຄວາມສຳຄັນກວ່າການຮຽນຮູ້. ເຖິງແມ່ນ ວ່າເດັກຂ້າງຖະໜົນຫຼາຍຄົນ ຈະມີການຕິດຕໍ່ພົວພັນໜ້ອຍ ຫຼື ຂາດການພົວພັນກັບຄອບຄົວ ຂອງພວກເຂົາ ກໍຕາມ ພວກເຂົາກໍຍັງຂາດຜູ້ໃຫຍ່ທີ່ໃຫ້ການດູແລ ແລະ ໃຫ້ຄຳແນະ ນຳ. ຍິ່ງໄປກວ່ານັ້ນ, ພວກເຂົາອາດຖືກທຳຮ້າຍທາງດ້ານຮ່າງກາຍ ຫຼື ທາງເພດຈາກຄອບຄົວ ຂອງເຂົາເອງ. ຍ້ອນແນວນັ້ນ, ຈຶ່ງເປັນເຫດ ໃຫ້ພວກເຂົາຕ້ອງແລ່ນໜີຈາກຄອບຄົວ ແລະ ໄປສິ້ນສຸດທີ່ຖະໜົນ ເຊິ່ງເປັນບ່ອນທີ່ເຂົາຕ້ອງປະເຊີນໜ້າກັບຄວາມຮຸນແຮງທີ່ຄ້າຍຄືກັນ.

- **ຄວາມເຈັບປ່ວຍ ແລະ ຄວາມທິວໂທຍ**

  ເດັກຈະບໍ່ສາມາດຮຽນໄດ້ດີ ຖ້າພວກເຂົາເຈັບປ່ວຍ, ທິວ ຫຼື ຂາດສານອາຫານ. ມີຫຼາຍຄັ້ງ ເດັກຈະຂາດຮຽນ ຫຼື ອາດຖືກຈັດເປັນເດັກປະເພດ “ນັກຮຽນຮັບຮູ້ຊ້າ”. ຖ້າພວກເຂົາບໍ່ໄດ້ຮັບ ການເອົາໃຈໃສ່ທີ່ຈຳເປັນ, ພວກເຂົາອາດຮູ້ສຶກວ່າ: ພວກເຂົາບໍ່ໄດ້ເປັນສະມາຊິກຂອງຫ້ອງ ຮຽນ ແລະ ເຂົາອາດປະລະໂຮງຮຽນໄປ. ຜົນກະທົບຈາກການເຈັບປ່ວຍ ຫຼື ຂາດສານອາ ຫານຍັງອາດຈະມີຜົນ ຕາມມາຕະຫຼອດຊີວິດ ຖ້າມັນເປັນເຫດໃຫ້ເກີດເປັນພິການທາງຮ່າງ ກາຍ ຫຼື ສະໝອງ.

- **ການລົງທະບຽນຢັ້ງຢືນການເກີດ**

  ໃນບາງປະເທດ, ຖ້າເດັກຄືດັ່ງ ທິບ ບໍ່ມີໜັງສືຢັ້ງຢືນການເກີດ ພວກເຂົາຈະບໍ່ສາມາດເຂົ້າ ໂຮງຮຽນ ຫຼື ອາດຈະຖືກອະນຸຍາດໃຫ້ຮຽນແບບຈຳກັດໃນຈຳນວນປີຮຽນ. ສິ່ງນີ້ແມ່ນມີຜົນກະ ທົບ ໂດຍສະເພາະ ແລ້ວແມ່ນຕໍ່ກັບເດັກຍິງຜູ້ທີ່ບໍ່ມີໜັງສືຢັ້ງຢືນການເກີດ ແລະ ພວກເຂົາກໍ ກາຍເປັນຜູ້ທີ່ບໍ່ເໝາະສົມ ສຳລັບການອະນຸຍາດໃຫ້ເຂົ້າຮຽນ ຫຼື ບໍ່ສາມາດສອບເສັງ. ພ້ອມ ນັ້ນມັນຍັງອາດສົ່ງຜົນ ກະທົບ ຕໍ່ຄົນຍົກຍ້າຍຖິ່ນຖານ, ກຸ່ມຊົນເຜົ່າ ແລະ ຜູ້ອົບພະຍົບ.

- **ການຢ້ານກົວຕໍ່ຄວາມຮຸນແຮງ**

  ຄວາມຢ້ານກົວຕໍ່ຄວາມຮຸນແຮງ ເມື່ອເວລາເດີນທາງມາໂຮງຮຽນ, ຢູ່ທີ່ໂຮງຮຽນ ຫຼື ເວລາເດີນ ທາງກັບເມືອເຮືອນ ອາດເປັນສາເຫດໜຶ່ງມາຈາກການຂົ່ມຂູ່ເດັກ ໃຫ້ປະລະການຮຽນ. ສຳລັບ

ເດັກຊາຍ ມັກຈະມີປະສົບການຈາກການຕີກັນ ຫຼື ຂົ່ມເຫັງກັນ, ສ່ວນເດັກຍິງກໍມີຄວາມສ່ຽງ ຕໍ່ການຖືກຂົ່ມຂືນທາງເພດ ຫຼື ຮູບແບບກໍ່ກວນທຳຮ້າຍອື່ນໆ. ສຳລັບຜູ້ທີ່ເປັນເຫຍື່ອຮັບເຄາະ ກຳ, ມັນຈະມີປົມດ້ອຍຕໍ່ຕົວຂອງເຂົາເອງ. ບາງເທື່ອ, ທິບອາດເຄີຍຕົກເປັນເຫຍື່ອ ແລະ ຕໍ່ມາ ກໍບໍ່ຢາກໄປໂຮງຮຽນ.

- **ຄວາມເປັນພິການແລະຄວາມຕ້ອງການພິເສດ**

  ເດັກທີ່ມີຄວາມເປັນພິການ ຫຼື ເດັກທີ່ມີຄວາມຕ້ອງການພິເສດສ່ວນໜວງໜາຍ ຈະບໍ່ໄດ້ໄປ ໂຮງຮຽນ. ໂດຍສະເພາະເມື່ອໂຮງຮຽນ ແລະ ລະບົບການສຶກສາບໍ່ມີນະໂຍບາຍ ຫຼື ແຜນງານ ສຳລັບການລວມ ເອົາເດັກທີ່ຂາດສະມັດຖະພາບ ດ້ານຮ່າງກາຍ, ອາລົມຄວາມຮູ້ສຶກ ຫຼື ການຮຽນຮູ້. ພວກເຂົາເຫຼົ່ານີ້ ແມ່ນເດັກໆທີ່ພວກເຮົາໂດຍປົກກະຕິຈະຄິດເຖິງເມື່ອສົນທະນາ ກ່ຽວກັບ“ການສຶກສາແບບຮຽນຮ່ວມ”.ພວກເຂົາອາດເປັນຜູ້ທີ່ບໍ່ເຄີຍມາໂຮງຮຽນຈັກເທື່ອຍ້ອນ ວ່າມີທັດສະນະຄະຕິ ຫຼື ຄວາມເຊື່ອທີ່ວ່າເຂົາເຫຼົ່ານີ້ ບໍ່ສາມາດຮຽນໄດ້. ພໍ່ແມ່ຜູ້ປົກຄອງ ຫຼື ສະມາຊິກຊຸມຊົນອາດຈະບໍ່ຮູ້ວ່າ ໃນການສຶກສາເດັກເຫຼົ່ານີ້ຄວນໄປໂຮງຮຽນ. ລວມທັງສິ່ງ ອຳນວຍຄວາມສະດວກຂອງໂຮງຮຽນ (ເຊັ່ນ: ຂັ້ນ ໃດ) ອາດເປັນສິ່ງໜຶ່ງ ທີ່ເປັນອຸປະສັກຕໍ່ ການມາໂຮງຮຽນຂອງເດັກເຫຼົ່ານີ້. ພວກເຂົາເປັນຜູ້ທີ່ມັກຈະອອກໂຮງຮຽນ ເພາະວ່າຫ້ອງ ຮຽນແອອັດເກີນໄປ ແລະ ພວກເຮົາກໍບໍ່ສາມາດທີ່ຈະມີເວລາຢ່າງພຽງ ພໍທີ່ຈະເອົາໃຈ ໃສ່ເຂົາ. ນອກຈາກນີ້, ເນື້ອໃນຫຼັກສູດ, ວິທີສິດສອນຂອງພວກເຮົາລວມທັງ “ພາສາ” ທີ່ໃຊ້ໃນການ ສອນ (ພາສາເວົ້າ, ວິດີໂອຊີດີ...) ກໍອາດບໍ່ເໝາະສົມສຳລັບເດັກພິການ ຫຼື ເດັກທີ່ມີຄວາມ ຕ້ອງການພິເສດ.

2.2 ສະພາບແວດລ້ອມຄອບຄົວ

ຄວາມທຸກຍາກແລະຄຸນຄ່າທາງປະຕິບັດຂອງການສຶກສາ

ຄວາມທຸກຍາກມັກຈະມີຜົນຕໍ່ເດັກວ່າ ຈະສາມາດເຂົ້າໂຮງຮຽນ ຫຼືບໍ່. ເຊັ່ນດຽວກັນ, ຖ້າເດັກບໍ່ໄປ ໂຮງຮຽນ, ລາວກໍຈະບໍ່ສາມາດທີ່ຈະຫາລາຍໄດ້ເພື່ອດຳລົງຊີວິດ ແລະ ອາດກາຍເປັນຄົນທີ່ຈົມຢູ່ໃນ ຄວາມທຸກຍາກ ແສນເຂັນໄປຕະຫຼອດ. ຍ້ອນພາລະໜັກໜ່ວງທາງການເງິນ, ພໍ່ແມ່ ຜູ້ທຸກຍາກມັກ ຈະໄດ້ຮັບການກົດດັນ ໃຫ້ສະໜອງແມ້ແຕ່ຄວາມຈຳເປັນທີ່ພື້ນຖານຂອງຊີວິດ. ດັ່ງນັ້ນ, ເດັກໃນກໍ ລະນີດຽວກັບ (ທິບ) ຕ້ອງໄດ້ ຊ່ວຍຄອບ**ຄົ**ວຫາລາຍໄດ້ເພື່ອຄ່າໃຊ້ຈ່າຍ ຂອງການສຶກສາ ແລະ ຊີວິດໃນອະນາຄົດ. ສິ່ງດັ່ງກ່າວ**ເ**ກີດຂຶ້ນ ໂດຍສະເພາະ ເມື່ອຄອບ**ຄົ**ວບໍ່ຮູ້ວ່າ ການສຶກສາມີຄວາມ ໝາຍ ສຳລັບຊີວິດປະຈຳວັນຂອງເຂົາ; ດັ່ງນັ້ນເຂົາເຈົ້າ**ຈ**ຶ່ງບໍ່ເຂົ້າໃຈວ່າເປັນຫຍັງລູກຫຼານຂອງເຂົາ ເຈົ້າ ຈຶ່ງ**ຄ**ວນໄປໂຮງຮຽນ**ກ**ົງກັນຂ້າມ**ຜ**ູ້ປົກ**ຄ**ອງ**ອ**າດ**ຮ**ູ້ສຶກ ອີ**ກ**ຕື່ມ**ວ**່າ ລູ**ກ**ຫຼ**ານ**ຂ**ອ**ງ**ເ**ຂ**ົ**າ**ອ**າ**ດ**ຈ**ະ

ໄດ້ຮັບການສຶກສາທີ່ບໍ່ມີຄຸນນະພາບ ແລະ ທັກສະທີ່ລູກຫຼານຈະຮຽນຮູ້ ໃນວຸງການສະເພາະໃດໜຶ່ງ ນັ້ນຈະມີຄຸນຄ່າກວ່າ ທັກສະທີ່ເດັກຈະຮຽນຮູ້ໃນຫ້ອງຮຽນ.

- **ຄວາມຂັດແຍ່ງ.** ພໍ່ແມ່ຜູ້ປົກຄອງບາງຄົນທີ່ມີການຜິດຖຽງກັນ ກ່ຽວກັບ ເລື່ອງເງິນຄຳ ຫຼື ປະເດັນ ບັນຫາອື່ນໆ ອາດຈະຂ້ຽນຕີລູກຫຼານຂອງຕົນ ເຊິ່ງຈະນຳໄປສູ່ຄວາມຮຸນແຮງ ແລະ ການທຳຮ້າຍ ຮ່າງກາຍ. ສິ່ງດັ່ງກ່າວ ອາດສົ່ງຜົນກະທົບຕໍ່ການໄປໂຮງຮຽນບໍ່ປົກກະຕິ ຫຼື ສົ່ງຜົນກະທົບໃຫ້ ແກ່ເດັກອາດເປັນເໝືອນກັບທິບ, ທີ່ຕ້ອງໜີຈາກບ້ານ ແລະ ໂຮງຮຽນ.
- **ການເອົາໃຈໃສ່ດູແລທີ່ບໍ່ເໝາະສົມ**. ຍ້ອນມີຄວາມຈຳເປັນຕ້ອງຊອກຫາເງິນຄຳເພື່ອລ້ຽງຊີບ ສະ ນັ້ນ, ພໍ່ແມ່ອາດຖືກແຮງກົດດັນ ໃຫ້ຍົກຍ້າຍຖິ່ນຖານເຊິ່ງອາດເປັນຊ່ວງເວລາຊົ່ວຄາວ ຫຼື ຍາວ ນານ. ຜົນທີ່ຕາມມາ ກໍຄື ເຂົາເຈົ້າອາດຈະປ່ອຍໃຫ້ເດັກຄືກັບ (ທິບ) ຢູ່ໃນຄວາມດູແລຂອງພໍ່ ເຖົ້າ, ແມ່ເຖົ້າ ຫຼື ຜູ້ ອື່ນໆ. ຄົນເຫຼົ່ານີ້ອາດບໍ່ມີຄວາມຮູ້ ແລະ ປະສົບການ ຫຼື ຊັບພະຍາກອນ ທີ່ຈະໃຫ້ການດູແລເດັກທີ່ເໝາະສົມ. ພວກເຂົາເຈົ້າອາດບໍ່ເຫັນຄຸນຄ່າຂອງການສຶກສາ ເມື່ອເຫັນ ວ່າເງິນ ມີຄວາມຈຳເປັນກ່ວາ.
- **ການຈຳແນກແລະການຕີຕຽນ / ການລັງກຽດເນື່ອງຈາກການຕິດເຊື້ອເອັດໄອວີ/ເອດ.** ເດັກທີ່ມີພໍ່ແມ່ເສຍຊີວິດຍ້ອນໂລກເອດ ຈະໄປເຂົ້າໂຮງຮຽນໜ້ອຍກ່ວາເດັກທີ່ບໍ່ໄດ້ສູນເສຍພໍ່ແມ່ ເຊັ່ນ ໃນບາງປະເທດ, ໂດຍສະເພາະເດັກຍິງຈະອອກໂຮງຮຽນເພື່ອດູແລອ້າຍເອື້ອຍນ້ອງ ຫຼື ຍ້ອນການເຈັບປ່ວຍ ຫຼື ເພື່ອຫາເງິນຄຳມາສະໜັບສະໜູນຄອບຄົວ. ໃນກໍລະນີ ສັງຄົມ ຫຼື ຊຸມ ຊົນອາດຄິດວ່າເດັກຈະເປັນ “ຜູ້ແຜ່ເຊື້ອ”, ດັ່ງນັ້ນ, ສະມາຊິກຊຸມຊົນ ແລະ ພ້ອມທັງຄູເອງ ກໍຕັ້ງໃຈຢາກໃຫ້ເຂົາເຈົ້າອອກໂຮງຮຽນ. ບາງທີ, (ທິບ) ຫຼື ສະມາຊິກໃນຄອຄົວຂອງ (ທິບ) ກໍອາດ ຕິດເຊື້ອເອັດໄອວີ ເຊັ່ນກັນ.

2.3. ສະພາບແວດລ້ອມຂອງຊຸມຊົນ.

- ການຈຳແນກບົດບາດຍິງ-ຊາຍ.

ຄວາມເຊື່ອແບບດັ້ງເດີມ ກ່ຽວກັບສະຖານະພາບ ແລະ ບົດບາດຂອງຜູ້ຊາຍຕໍ່ກັບຜູ້ຍິງ ແມ່ນຈຳກັດ ການເຂົ້າເຖິງໂຮງຮຽນຂອງເດັກຍິງ. ຢູ່ໃນຊຸມຊົນທີ່ເຊື່ອວ່າ : “ແມ່ຍິງຕ້ອງເປັນຜູ້ດ້ອຍກ່ວາຜູ້ຊາຍ”; ເດັກຍິງມັກຈະ ຖືກເກັບໄວ້ທີ່ຄອບຄົວ ແລະ ບໍ່ໄດ້ເຂົ້າໂຮງຮຽນເພື່ອເຮັດວຽກບ້ານ-ວຽກເຮືອນ. ສິ່ງນີ້ ອາດຖືກແຮງກົດດັນ ໂດຍການປະຕິບັດທີ່ເປັນປະເພນີເຊິ່ງຜູ້ຍິງແຕ່ງງານ ຕັ້ງແຕ່ເວລາຍັງເຍົາໄວ ຕ້ອງອອກຈາກຄອບຄົວໄປ; ຍ້ອນແນວນັ້ນ, ຈຶ່ງບໍ່ໄດ້ຊ່ວຍເຫຼືອຄອບຄົວ ແລະ ພໍ່ແມ່ກໍຈະບໍ່ຮູ້ເຫດຜົນ ວ່າ ເປັນຫຍັງ ຈຶ່ງຕ້ອງໃຊ້ຈ່າຍເງິນຄຳ ເພື່ອການສຶກສາຂອງລູກທີ່ເປັນຜູ້ຍິງ.

- ຄວາມແຕກຕ່າງດ້ານວັດທະນະທຳແລະປະເພນີທ້ອງຖິ່ນ.

ເດັກທີ່ມາຈາກຄອບຄົວທີ່ແຕກຕ່າງຈາກຊຸມຊົນທີ່ກວ້າງຂວາງໃນແງ່ຂອງພາສາ, ສາສະໜາ, ຊັ້ນຄົນ ຫຼື ລັກສະນະທາງວັດທະນະທຳຈະມີຄວາມສ່ຽງເປັນພິເສດທີ່ຈະຖືກປະຕິເສດໃຫ້ເຂົ້າໂຮງຮຽນ. ບາງ ຄັ້ງ, ເຂົາເຈົ້າຈະໄດ້ຮັບໂອກາດ ເຂົ້າເຖິງອາຄານສະຖານທີ່ການສຶກສາທີ່ດ້ອຍກວ່າ, ໄດ້ຮັບການ ສິດສອນທີ່ມີຄຸນນະ ພາບຕ່ຳກວ່າ ແລະ ມີສື່/ອຸປະກອນການສິດສອນພຽງເລັກນ້ອຍ. ນອກຈາກນັ້ນ ພວກເຂົາຍັງມີໂອກາດໜ້ອຍ ກວ່າຜູ້ອື່ນທີ່ຈະໄດ້ສຶກສາໃນລະດັບສູງ. ຍິ່ງໄປກວ່ານັ້ນ, ຢູ່ໃນບາງ ຊຸມຊົນ, ຈະມີຮີດຄອງປະເພນີຂອງການເລີ້ມຕົ້ນຊີວິດ ໃນການເຮັດວຽກຕັ້ງແຕ່ໃນໄວເດັກໂດຍບໍ່ຮູ້ຜົນ ປະໂຫຍດທີ່ໄດ້ ຮັບຈາກການສຶກສາທີ່ມີຄຸນນະພາບ. ປະເພນີນີ້ ໄດ້ຮັບການສືບທອດ ຈາກຄົນລຸ້ນ ໜຶ່ງ ໄປສູ່ຄົນລຸ້ນຕໍ່ໄປ ໂດຍຈະເຮັດໃຫ້ວົງຈອນຊີວິດແຫ່ງຄວາມທຸກຍາກ ແລະ ກີດໜັງສືໝູນວຽນ ຕະຫຼອດໄປ. (ທິບ)ອາດເປັນສະມາຊິກຄົນໜຶ່ງໃນ ຊຸມຊົນເຫຼົ່ານີ້.

- ທັດສະນະຄະຕິທີ່ບໍ່ຖືກຕ້ອງ.

ທັດສະນະຄະຕິທີ່ບໍ່ຖືກຕ້ອງຕໍ່ເດັກທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງ ບາງທີກໍສາມາດ ເປັນອຸປະສັກກີດຂວາງອັນໃຫຍ່ຫຼວງທີ່ສຸດອັນໜຶ່ງອັນດຽວ ຕໍ່ການບັນຈຸເດັກເຫຼົ່ານີ້ເຂົ້າໂຮງຮຽນ. ທັດ ສະນະຄະຕິ ທີ່ບໍ່ຖືກຕ້ອງ ສາມາດເຫັນໄດ້ໃນທຸກລະດັບ ເຊັ່ນ: ພໍ່ແມ່ ຜູ້ປົກຄອງ, ສະມາຊິກຊຸມຊົນ, ໂຮງຮຽນ ແລະ ຄູ, ພະນັກງານລັດ, ແລະ ໃນກຸ່ມເດັກທີ່ດ້ອຍໂອກາດດ້ວຍກັນ. ຄວາມຢ້ານກົວ, ສິ່ງຕ້ອງຫ້າມ, ຄວາມອັບອາຍ, ຄວາມເມີນເສີຍປະປ່ອຍ ແລະ ການໃຫ້ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ທຸກຢ່າງເຫຼົ່ານີ້ໄດ້ກະຕຸກຊຸກຍູ້ທັດສະນະຄະຕິ ທີ່ບໍ່ຖືກຕ້ອງຕໍ່ເດັກກຸ່ມດັ່ງກ່າວ ແລະ ສະຖານະພາບ ຂອງເຂົາເຈົ້າ. ເດັກເຫຼົ່ານີ້ລວມທັງຄອບຄົວຂອງເຂົາເຈົ້າເອງ ອາດຈະມີຄວາມພາກພູມໃຈ ໃນການ ພັດທະນາຕົນເອງລຸດນ້ອຍຖອຍລົງ, ດັ່ງນັ້ນ ເດັກຈຶ່ງລີ້ຊ່ອນ ແລະ ຫຼີກລ່ຽງ ການພົວພັນທາງສັງຄົມ ແລ້ວກໍກາຍເປັນສະມາຊິກຊຸມຊົນທີ່ບໍ່ຄ່ອຍພົບເຫັນ ໃນຊຸມຊົນຂອງເຂົາເຈົ້າ. ສິ່ງທີ່ກ່າວມານີ້ອາດ ຈະນຳໄປສູ່ການຄັດອອກຈາກໂຮງຮຽນໂດຍກົງ, ເຖິງແມ່ນວ່າເຂົາເຈົ້າຈະມີສິດສະເໝີພາບ ແລະ ຄວາມຕ້ອງການ ຄືກັບ ເດັກຄົນອື່ນໆ ກໍຕາມທິບກໍອາດເປັນເຫຍື່ອຂອງທັດສະນະຄະຕິທີ່ບໍ່ຖືກຕ້ອງ ນີ້ດ້ວຍ.

2.4. ສະພາບແວດລ້ອມໃນໂຮງຮຽນ

ພາລະກິດຂອງໂຮງຮຽນເຮົາ ແມ່ນຕ້ອງໃຫ້ການສຶກສາອົບຮົມເດັກທຸກຄົນຢ່າງມີປະສິດທິຜົນ ໂດຍ ການໃຫ້ທັກສະທີ່ເຂົາຈຳເປັນຕໍ່ການດຳລົງຊີວິດ ແລະ ການຮຽນຮູ້ຕະຫຼອດຊີວິດ. ຖ້າເບິ່ງຕາມປະ ຫວັດສາດແລ້ວ, ໂຮງຮຽນຂອງເຮົາກໍບໍ່ທັນມີເຄື່ອງມືຫຼືອຸປະກອນທີ່ເໝາະສົມດີເທົ່າທີ່ຄວນ ເພື່ອທີ່ຈະ ສຶກສາອົບຮົມເດັກທີ່ມາຈາກ ພື້ນຖານ ແລະ ຄວາມສາມາດທີ່ຫຼາກຫຼາຍ. ໃນຂະນະດຽວກັນນັ້ນ

ສະພາບແວດລ້ອມຂອງຄອບຄົວ ແລະ ຊຸມຊົນ ກໍອາດມີສ່ວນເຮັດໃຫ້ເດັກບໍ່ມາໂຮງຮຽນ, ການເຮັດການປັບປຸງຕ່າງໆ ໃນເງື່ອນໄຂເຫຼົ່ານີ້ພຽງຢ່າງດຽວ ກໍບໍ່ອາດສາມາດສ້າງໂຮງຮຽນເປັນແບບຮຽນຮ່ວມໄດ້. ຕາມຄວາມເປັນຈິງແລ້ວ, ປັດໄຈຕ່າງໆ ທີ່ອາດຈະບໍ່ກະຕຸກຊຸກຍູ້ສົ່ງເສີມ ໃຫ້ເດັກບາງຄົນມາໂຮງຮຽນ ລວມທັງ ການຂາດໂຮງຮຽນ ແລະ ປະລະການຮຽນແຕ່ຍັງເຍົ້າໄວຄືດັ່ງ (ທິບ) ສະນັ້ນ ພວກເຮົາຄວນມີບົດບາດສຳຄັນທີ່ຈະຕ້ອງປະຕິບັດ ໃຫ້ ແທດເໝາະເຊັ່ນ. ທ່ານສາມາດປ່ຽນແປງໂຮງຮຽນຂອງທ່ານໃຫ້ເປັນສະຖານທີ່ ທີ່ເດັກທຸກຄົນສາມາດມາຮຽນໄດ້. ຢູ່ຂ້າງລຸ່ມນີ້ ແມ່ນເທດຜົນຈຳນວນໜຶ່ງທີ່ບົ່ງບອກວ່າ ເປັນຫຍັງເດັກບາງຄົນບໍ່ມາໂຮງຮຽນ ແລະ **ມີປັດໄຈໃດແດ່ທີ່ເກີດຈາກພື້ນຖານຂອງໂຮງຮຽນ ອື່ນໆ ອີກບໍ່ທີ່ຍັງຈະສາມາດ ສົ່ງຜົນກະທົບ ຕໍ່ການມາ ໂຮງຮຽນຂອງເດັກ ? ອີກປະການໜຶ່ງຄ່າໃຊ້ຈ່າຍຕ່າງໆ (ໂດຍກົງ ແລະ ເຊື່ອງຊ້ອນ).** ສຳລັບການຮຽນໜ້າຍໆຄອບຄົວທີ່ທຸກຍາກເປັນຕົ້ນ, ຄ່າໂຮງຮຽນ, ຄ່າສອບເສັງ, ຄ່າປະກອບສ່ວນໃຫ້ໂຮງຮຽນ ຫຼື ສະມາຄົມ ພໍ່ແມ່ນັກຮຽນ, ນັບທັງຄ່າປຶ້ມ ຄ່າສໍ, ເຄື່ອງແບບນັກຮຽນ ຫຼື ຄ່າເດີນທາງລ້ວນແຕ່ ເປັນສາເຫດເຮັດໃຫ້ເດັກຄືດັ່ງ **(ທິບ)** ໜີຈາກໂຮງຮຽນກໍອາດເປັນໄປໄດ້.

- ທີ່ຕັ້ງ.

ໃນຂົງເຂດຊົນນະບົດ, ໂດຍສະເພາະຖ້າຫາກໂຮງຮຽນຕັ້ງຢູ່ຫ່າງໄກຈາກຊຸມຊົນ, ເດັກຄືດັ່ງທິບ, ເດັກຍິງ ເນື່ອງຈາກເສັ້ນທາງທີ່ຫ່າງໄກຈາກເຮືອນເຖິງໂຮງຮຽນ ອາດບໍ່ສົ່ງເສີມໃຫ້ພໍ່ແມ່ສົ່ງລູກສາວໄປໂຮງຮຽນ ເພາະວ່າມີຄວາມເປັນຮ່ວງເຖິງຄວາມປອດໄພຂອງເຂົາ ອີກປະການໜຶ່ງເດັກພິການ ກໍອາດບໍ່ໄດ້ໄປເຂົ້າໂຮງຮຽນ ຖ້າຫາກບໍ່ມີການຂົນສົ່ງທີ່ເໝາະສົມ ສຳລັບຮັບ-ສົ່ງເຂົາໄປໂຮງຮຽນໄດ້.

- ຕາຕະລາງເວລາ.

(ທິບ) ອາດຈະຢາກຮຽນ, ແຕ່ບໍ່ສາມາດທີ່ຈະຮຽນໃນລະຫວ່າງຊົ່ວໂມງຮຽນປົກກະຕິ. ຕາຕະລາງ ແລະ ປະຕິທິນໂຮງຮຽນກໍຂັດແຍ່ງກັບເວລາເຮັດວຽກຂອງ (ທິບ) ເຊິ່ງເຮັດໃຫ້ລາວບໍ່ສາມາດມາຮຽນໄດ້ ເພາະວ່າ ຕ້ອງເຮັດວຽກຫາລາຍໄດ້ ໃຫ້ແກ່ຄອບຄົວຍິ່ງໄປກວ່ານັ້ນ, ເດັກຍິງອາດປະລະການຮຽນເມື່ອການໄປໂຮງຮຽນຫາກຂັດແຍ່ງກັບຄວາມຮັບຜິດຊອບໃນຄອບຄົວ ເຊັ່ນ: ການເຮັດວຽກເຮືອນ ແລະ ເບິ່ງແຍງ/ດູແລນ້ອງ.

- ອາຄານສະຖານທີ່/ສິ່ງອຳນວຍຄວາມສະດວກ.

ຖ້າໂຮງຮຽນຂອງເຮົາບໍ່ມີອາຄານສະຖານທີ່ ທີ່ເໝາະສົມ, ສິ່ງນີ້ກໍອາດເປັນສາເຫດໜຶ່ງ ທີ່ເຮັດໃຫ້ເດັກບໍ່ມາໂຮງຮຽນ.

ຕົວຢ່າງ : ຖ້າບໍ່ມີຫ້ອງນ້ຳແຍກຍິງ-ຊາຍ ສຳລັບເດັກຍິງອາດມີຄວາມຫຍຸ້ງຍາກ ແລະ ສິ່ງຜົນກະທົບຕໍ່ເດັກຍິງທີ່ມີຮອບວຽນປະຈຳເດືອນບໍ່ຢາກມາຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ. ຍິ່ງໄປກວ່ານັ້ນ, ສິ່ງອຳນວຍຄວາມສະດວກບໍ່ເໝາະສົມ ແລະ ບໍ່ພຽງພໍ ສຳລັບເດັກພິການກໍຈະສິ່ງຜົນກະທົບ ໃຫ້ເດັກພິການເຫຼົ່ານີ້ ບໍ່ຢາກມາ ແລະ ບໍ່ໄດ້ ເຂົ້າໂຮງຮຽນ.

- **ຄວາມກຽມພ້ອມ.**

ໜຶ່ງໃນເຫດຜົນທົ່ວໄປທີ່ສຸດທີ່ວ່າ ເປັນຫຍັງເດັກທີ່ມີພື້ນຖານແລະຄວາມສາມາດແຕກຕ່າງ ຈະຖືກຄັດອອກ ຫຼື ປະປ່ອຍຈາກໂຮງຮຽນ ແມ່ນເນື່ອງມາຈາກໂຮງຮຽນ ແລະ ຄູບໍ່ທັນກຽມພ້ອມທີ່ຈະສອນພວກເຂົາ. ພວກ ເຂົາບໍ່ຮູ້ວິທີ ທີ່ຈະສິດສອນ ຍ້ອນວ່າ,ບໍ່ເຄີຍໄດ້ຮັບການເຝິກອົບຮົມ, ແນວຄວາມຄິດ ຫຼື ຂໍ້ມູນຄວາມຮູ້ທີ່ຈຳເປັນ ເພື່ອຊ່ວຍເດັກເຫຼົ່ານີ້ຮຽນຮູ້. ດັ່ງນັ້ນ, ເຖິງວ່າເດັກເຫຼົ່ານີ້ຈະມາໂຮງຮຽນກໍຕາມ, ເຂົາກໍຈະບໍ່ໄດ້ຮັບການເອົາໃຈໃສ່ພຽງພໍ ແລະ ໄດ້ຮັບການສຶກສາທີ່ບໍ່ມີຄຸນນະພາບ ຖ້າທຽບໃສ່ເດັກຜູ້ອື່ນໆ.

- **ຂະໜາດຂອງຫ້ອງຮຽນ, ຊັບພະຍາກອນ ແລະ ວຽກໜັກ.**

ຂະໜາດຫ້ອງຮຽນສ່ວນໃຫຍ່ແອອັດແມ່ນເປັນເລື່ອງທຳມະດາທີ່ມີໃນທຸກໆປະເທດ ແລະ ອາດເປັນອຸປະສັກກີດຂວາງຕໍ່ການບັນຈຸເດັກທີ່ມີພື້ນຖານ ແລະ ຄວາມສາມາດທີ່ຫຼາກຫຼາຍເຂົ້າຮຽນຮ່ວມ. ເຊັ່ນ: ໃນປະເທດຮັ່ງມີ ທີ່ມີຊັບພະຍາກອນຫຼາກຫຼາຍ ເຊັ່ນວ່າ ຂະໜາດຂອງຫ້ອງຮຽນ ທີ່ບັນຈຸເດັກ ພຽງ 30 ຄົນ ກໍຖືວ່າເປັນຫ້ອງ ໃຫຍ່ແອອັດເກີນໄປແລ້ວ, ກົງກັນຂ້າມບາງປະເທດທີ່ມີຊັບພະຍາກອນສື່ການສອນຈຳກັດນັ້ນ ຫ້ອງຮຽນ ທີ່ບັນຈຸ ເດັກ 60-100 ຄົນ ອາດເປັນເລື່ອງທຳມະດາ. ດັ່ງນັ້ນ, ຄູຈຶ່ງມີວຽກ ທີ່ໜັກໜ່ວງຂຶ້ນຕື່ມ ແລະ ມັກຈະບໍ່ມີ ຄວາມສຸກໃຈ. ແນ່ນອນ, ຂະໜາດຫ້ອງຮຽນນ້ອຍ, ມີການຈັດຕັ້ງທີ່ດີ ຈະເປັນທີ່ປາຖະໜາ ຫຼາຍກວ່າຫ້ອງຮຽນ ທີ່ມີຊັບພະຍາກອນຂາດເຂີນ ລວມທັງສື່/ອຸປະກອນ ແລະ ເວລາຂອງຄູ. ເຖິງຢ່າງໃດກໍຕາມ, ຂະໜາດຂອງ ຫ້ອງຮຽນ**ບໍ່**ໄດ້ເປັນປັດໄຈທີ່ສຳຄັນສະເໝີໄປ ສຳລັບການຮຽນຮ່ວມທີ່ປະສົບຜົນສຳ ເລັດ, ຖ້າຫາກເຮົາມີ **ທັດສະນະຄະຕິທີ່ຖືກຕ້ອງ ແລະ ຍິນດີຕ້ອນຮັບ.** ມີຫຼາຍຕົວຢ່າງຂອງເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ໄດ້ຖືກບັນຈຸເຂົ້າຮຽນຮ່ວມ ສຳເລັດຜົນໃນຫ້ອງຮຽນທີ່ມີເດັກຈຳນວນ ຫຼາຍ ແລະ ແອອັດ. ຄືດັ່ງ ຈະໄດ້ສົນທະນາຂ້າງລຸ່ມນີ້, ອຸປະສັກກີດຂວາງທາງດ້ານທັດສະນະຄະຕິຕໍ່ການຮຽນຮ່ວມ ຈະເປັນອຸປະສັກທີ່ໃຫຍ່ຫຼວງ ກວ່າອຸປະສັກທີ່ເກີດຂຶ້ນ ໂດຍການຂາດເຂີນຊັບພະຍາກອນສື່ອຸປະກອນການຮຽນ-ການສອນ.

ສະຫລຸບສັ້ງລວມອຸປະສັກທີ່ກີດຂວາງຕໍ່ການຮຽນຮ່ວມ

- **ເດັກ:** ຂາດເຮືອນຢູ່ອາໄສ ແລະ ຈຳເປັນຕ້ອງເຮັດວຽກ; ເຈັບປ່ວຍ ແລະ ທິວໂທຍ;ບໍ່ມີທະບຽນ ການເກີດ; ຄວາມຮຸນແຮງ;

- **ຄອບຄົວ:** ທຸກຍາກ; ມີຄວາມຂັດແຍ່ງ; ການດູແລທີ່ບໍ່ເໝາະສົມ; ເອັດໄອວີ/ເອດ
- **ຊຸມຊົນ:** ການຈຳແນກປິດບາດຍິງ-ຊາຍ; ຄວາມແຕກຕ່າງທາງວັດທະນະທຳ ແລະ ຮີດຄອງ ປະເພນີ; ທັດສະນະຄະຕິທາງລົບ / ບໍ່ຖືກຕ້ອງ
- **ໂຮງຮຽນ:** ຄ່າໃຊ້ຈ່າຍຕ່າງໆ; ທີ່ຕັ້ງ; ຕາຕະລາງເວລາ; ອາຄານສະຖານທີ່; ຄວາມກຽມພ້ອມ; ຂະໜາດຫ້ອງຮຽນ; ຊັບພະຍາກອນ ແລະ ການເຮັດວຽກໜັກ

ມີອຸປະສັກອັນໃດ ຕື່ມອີກບໍ່ ນອກຈາກທີ່ໄດ້ເວົ້າມາຂ້າງເທິງ? ໃຫ້ທ່ານຂຽນລົງໃສ່ເຈ້ຍແຜ່ນໃຫຍ່ ຫຼື ສົນທະນາຮ່ວມກັນ? ຂຽນເປັນລາຍການອຸປະສັກກີດຂວາງທັງໝົດທີ່ໄດ້ຄົ້ນຄິດ ຫຼື ໄດ້ຮຽນຮູ້ຈາກ ການອ່ານ ແລະ ສົນທະນາຂໍ້ມູນຄວາມຮູ້ທີ່ໃຫ້ມາຂ້າງເທິງ.

ກິດຈະກຳເພື່ອປະຕິບັດ: ອຸປະສັກກີດຂວາງ ແລະ ໂອກາດຕ່າງໆ

- ♦ ແຕ່ລະຄົນຄວນປິດຕາແລ້ວໃຫ້ຈິນຕະນາການວ່າ ພວກເຂົາເປັນ (ທິບ) ຫຼື ເດັກຄົນໃດຄົນໜຶ່ງທີ່ ໂດຍປົກກະຕິຖືກປະປ່ອຍອອກຈາກໂຮງຮຽນ. ໃຫ້ຄິດສຳລັບຕົວເອງວ່າ ທ່ານຊື່ ຫຍັງ, ອາຍຸເທົ່າໃດ, ເພດໃດ; ອາໄສຢູ່ໃສ ແລະ ຢູ່ກັບໃຜ; ສະພາບຊີວິດການເປັນຢູ່ເປັນ ແນວໃດ(ເຊັ່ນດຽວກັບ ທິບ).
- ♦ ໃຫ້ຄິດກ່ຽວກັບໂອກາດຕ່າງໆອັນໃດ ທີ່ທ່ານອາດມີໃນການລົງທະບຽນເຂົ້າຮຽນ (ຕົວຢ່າງ: ໂຮງຮຽນອາດຢູ່ໃກ້ເຮືອນຂອງທ່ານ) ແລະ ອຸປະສັກກີດຂວາງອັນໃດທີ່ອາດຈະມີ. ທ່ານ ອາດຈະກ່າວ ເຖິງລາຍການຂ້າງເທິງ, ຈາກລາຍການອຸປະສັກໃຫຍ່ໆ ແລະ ຈາກແຜ່ນເຈ້ຍ ທີ່ທ່ານໄດ້ຂຽນຈາກເຄື່ອງມືທຳອິດໃນປຶ້ມຄູ່ມືເຫຼັ້ມນີ້ ກ່ຽວກັບການກຳນົດອຸປະສັກກີດຂວາງ ຕໍ່ການຮຽນຮ່ວມ.
- ♦ ໃນເຈ້ຍແຜ່ນໃຫຍ່ໜຶ່ງ, ແຕ້ມຮູບວົງມົນ 4 ອັນ ໃສ່ຂ້າງໃນເຊິ່ງກັນ ແລະ ກັນ. ວົງມົນ ທີ່ນ້ອຍສຸດຢູ່ ໃຈກາງແມ່ນແທນໃຫ້ເດັກ, ວົງມົນຖັດໄປເປັນຕົວແທນໃຫ້ຄອບຄົວ, ຖັດໄປ ເປັນຕົວແທນໃຫ້ຊຸມຊົນ ແລະ ຖັດໄປອີກເປັນຕົວແທນໃຫ້ໂຮງຮຽນ. ໃຫ້ໝາຍຊື່ ຫຼື ສັນຍາ ລັກວົງມົນທັງໝົດ.
- ♦ ໃຊ້ສໍສີທີ່ແຕກຕ່າງກັນ ຫຼື ຂຽນແບບຕ່າງໆ ເພື່ອສະແດງໃຫ້ເຫັນອຸປະສັກກີດຂວາງ ແລະ ໂອກາດຕ່າງໆ, ແຕ່ລະຄົນຄວນຈະຂຽນແນວຄວາມຄິດ ລົງໃສ່ແຜນພູມສຳລັບ ແຕ່ລະລະ ດັບ (ເດັກ, ຄອບ ຄົວ, ຊຸມຊົນ, ໂຮງຮຽນ). ໃຫ້ເຮັດດ້ວຍກັນເປັນກຸ່ມ, ບໍ່ໃຫ້ເຮັດຄົນດຽວ. ເຖິງວ່າໃຜຜູ້ໜຶ່ງຈະໄດ້ຂຽນໂອກາດຕ່າງໆ ແລະ ອຸປະສັກພາຍໃນລະດັບກ່ອນແລ້ວກໍ ຕາມ, ໃຫ້ຂຽນລົງອີກຖ້າມັນສອດ ຄ່ອງກັບທ່ານອີກ.
- ♦ ຫຼັງຈາກທີ່ແຕ່ລະຄົນເຮັດສຳເລັດແລ້ວ, ໃຫ້ສັງເກດເບິ່ງທີ່ແຜນພູມທີ່ທ່ານເຮັດ. ຍັງມີອຸປະ ສັກກີດຂວາງ ແລະໂອກາດອັນອື່ນໆອີກ ຫຼື ບໍ່? ມີອຸປະສັກຫຼາຍກວ່າທີ່ທ່ານຄາດຄິດໄວ້ ຫຼື

ບໍ? ອຸປະສັກ ເຫຼົ່ານີ້ເປັນຕົວແທນຂອງຄວາມຫຍຸ້ງຍາກທີ່ທ້າທາຍ ທີ່ຕ້ອງເອົາຊະນະໃຫ້ໄດ້ ເພື່ອຈະເຮັດໃຫ້ ເດັກນ້ອຍຄົ້ດ້ງ (ທິບ) ສາມາດໄດ້ມາໂຮງຮຽນ ແລະ ສິ່ງເຫຼົ່ານີ້ສາມາດ ເອົາຊະນະ ດ້ວຍການໄດ້ຮັບຄວາມຊ່ວຍເຫຼືອຈາກທ່ານ.

- ໂອກາດທີ່ມີລັກສະນະທົ່ວໄປທີ່ສຸດ ສຳລັບແຕ່ລະລະດັບ ແລະ ລະຫວ່າງລະດັບ ມີຫຍັງແດ່ (ມີໂອ ກາດອັນໃດແດ່ທີ່ຖືກຂຽນລົງຫຼາຍທີ່ສຸດ)?.ໂອກາດເຫຼົ່ານີ້ “ແທ້ຈິງ” ຫຼືບໍ່? **ປະຈຸບັນ**ປະກົດມີໂອກາດສຳລັບເດັກທີ່ມີພື້ນຖານ ແລະ ຄວາມສາມາດຫຼາຍຢ່າງແຕກ ຕ່າງ ຢູ່ໃນຊຸມຊົນຂອງທ່ານ, ຫຼື ມີສິ່ງທີ່ພວກເຮົາຄິດວ່າ**ຄວນຈະເກີດ**ຢູ່ບ່ອນນັ້ນຫຼືບໍ່? ຖ້າ ຫາກມີສິ່ງເຫຼົ່ານີ້ ຈະເປັນໂອກາດທີ່ທ່ານສາມາດວາງເປົ້າໝາຍ ເພື່ອບັນລຸ ໂດຍຜ່ານໂຄງ ການຕ່າງໆ ທີ່ຈະນຳໄປປະຕິບັດໃຫ້ເກີດຜົນ. ມັນເປັນຕົວແທນຂອງວິໄສທັດ ໃນສິ່ງທີ່ ທ່ານຕ້ອງການບັນລຸຜົນ ໃນການຍົກຍ້າຍອຸປະສັກກີດຂວາງອອກໄປ ແລະ ເສີມຂະຫຍາຍ ໂອກາດຕ່າງໆ ເພື່ອການຮຽນຮ່ວມ.
- ໂອກາດ ແລະ ອຸປະສັກຕ່າງໆ ຈະແຜ່ກະຈາຍອອກຢ່າງເທົ່າກັນ ຫຼື ມັນຈະສຸມໃສ່ລະດັບ ໃດໜຶ່ງຫຼາຍກວ່າລະດັບອື່ນ? ສິ່ງນີ້ຈະຊ່ວຍທ່ານກຳນົດໄດ້ວ່າ ລະດັບໃດຄວນໄດ້ຮັບບູລິ ມະສິດ ເອົາໃຈໃສ່ໃນການພັດທະນາການເຂົ້າແຊກແຊງ ແລະ ການເອົາຊະນະອຸປະສັກ.
- ມີໂອກາດ ແລະ ອຸປະສັກຕ່າງໆ ທີ່ຄ້າຍຄືກັນຊ້ຳໄປມາ ຢູ່ພາຍໃນ ແລະ ລະຫວ່າງລະດັບ ຕ່າງໆ ຫຼືບໍ່? ສິ່ງເຫຼົ່ານີ້ ອາດສາມາດເປັນຈຸດເລີ້ມຕົ້ນທີ່ດີເພື່ອດຳເນີນການປະຕິບັດ
- ມີອຸປະສັກຕ່າງໆ ທີ່ຕົກຢູ່ພາຍໃນຫຼາຍກວ່າໜຶ່ງລະດັບ, ເຊັ່ນ: ທັດສະນະຄະຕິ ທີ່ບໍ່ ຖືກຕ້ອງ ຂອງ (ຄູ, ສະມາຊິກຊຸມຊົນ) ຫຼືບໍ່? ສິ່ງເຫຼົ່ານີ້ອາດຈຳເປັນຕ້ອງໃຊ້ຄວາມພະຍາຍາມແບບ ຮ່ວມມື ເພື່ອ ເອົາຊະນະ .

ຄຳຖາມ:

1. ອຸປະສັກທີ່ກີດຂວາງການຮຽນຮ່ວມມີຫັຍງແດ່ ?
2. ນອກຈາກອຸປະສັກທີ່ລະບຸໄວ້ໃນບົດນີ້ແລ້ວທ່ານຄິດວ່າຍັງອຸປະສັກອັນໃດຕື່ມອີກ ທີ່ເປັນການກີດຂວາງໃນການຮຽນຮ່ວມ. ?

ບົດທີ 8: ການຊອກຫາເດັກ ແລະ ສາເຫດທີ່ເດັກບໍ່ໄດ້ເຂົ້າໂຮງຮຽນ

I. ຄວາມໝາຍ ແລະ ຄວາມສຳຄັນຂອງແຜນທີ່ການສຶກສາບ້ານ

ແຜນທີ່ການສຶກສາບ້ານແມ່ນແຜນວາດອັນໜຶ່ງ ທີ່ສາມາດຊີ້ບອກທີ່ຕັ້ງຂອງບ້ານ , ເຮືອນ, ສຳນັກງານອົງການຕ່າງໆ ແລະ ອື່ນໆພາຍໃນບ້ານ . ສາມາດຮູ້ໄດ້ເຖິງສະຖິຕິຂອງເດັກໃນເກນອາຍຸ 6 -14 ປີ ໄດ້ ເຂົ້າຮຽນ , ບໍ່ໄດ້ເຂົ້າຮຽນຢູ່ແຕ່ລະຄົວເຮືອນ.

ແຜນທີ່ການສຶກສາ ເປັນບ່ອນອີງອັນໜຶ່ງ ທີ່ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ, ສັງຄົມ, ພາຍໃນບ້ານ ຖ້າຫາກມີແຜນທີ່ການສຶກສາ ມັນຈະຊ່ວຍໃຫ້ພວກເຮົາຮູ້ໄດ້ບັນດາຂໍ້ມູນ, ສະຖິຕິຕ່າງໆ ແລະ ສະພາບການສຶກສາຢູ່ໃນບ້ານ ,ເປັນຕົ້ນເດັກໃນເກນອາຍຸ 6 -14 ປີ, ໄດ້ເຂົ້າຮຽນ , ບໍ່ໄດ້ເຂົ້າຮຽນ , ຢູ່ເຮືອນຫລັງໃດ, ແລະ ຍັງເປັນບ່ອນອີງ ໃຫ້ແກ່ການສ້າງແຜນພັດທະນາການສຶກສາ, ເຮັດໃຫ້ອັດຕາສຸດທິ (ເປີເຊັນຂອງການ ເຂົ້າຮຽນ ຕາມເກນອາຍຸ) ການເຂົ້າຮຽນຊັ້ນປະຖົມເພີ້ມຂຶ້ນ , ອັດຕາປະລະການຮຽນ ແລະ ອັດຕາຄ້າງຫ້ອງລຸດລົງ.

ດັ່ງນັ້ນ, ຄພສບ ມີຄວາມຈຳເປັນຕ້ອງໄດ້ສ້າງແຜນທີ່ການສຶກສາຂອງບ້ານ ເພື່ອຕິດຕາມເກັບກຳຂໍ້ມູນ ແລະ ຊຸກຍູ້ຊ່ວຍເຫລືອໃຫ້ເດັກໃນເກນອາຍຸ 6 -14 ປີ, ທຸກຄົນພາຍໃນບ້ານໄດ້ຮັບການສຶກສາຢ່າງ ທົ່ວເຖິງ.

1. ວິທີເກັບກຳຂໍ້ມູນເພື່ອສ້າງແຜນທີ່ການສຶກສາບ້ານ

1. ປະສານງານແຕ່ລະຄອບຄົວພາຍໃນບ້ານ ເພື່ອໃຫ້ເຂົາເຈົ້າມີສ່ວນຮ່ວມໃຫ້ຂໍ້ມູນລະອຽດຈະແຈ້ງ.
2. ທີມງານລົງສຳຫລວດຕ້ອງໄດ້ຜ່ານການເຝິກອົບຮົມມາກ່ອນ.
3. ແບ່ງທີມງານຮັບຜິດຊອບການລົງສຳຫລວດໃສ່ແຕ່ລະໜ່ວຍ ຫຼື ຂອບເຂດເຮືອນຕິດກັນ.
4. ນຳໃຊ້ແບບຟອມລົງສຳຫລວດແຕ່ລະຫລັງຄາເຮືອນ.
5. ຂໍ້ມູນຕ່າງໆຈະຕ້ອງໄດ້ມາຈາກ ພໍ່-ແມ່, ປື້ມສຳມະໂນຄົວ. ຫລີກເວັ້ນການກະຕວງ.
6. ສັງລວມຂໍ້ມູນສະຖິຕິ, ກຳນົດເລກທີເຮືອນໃໝ່, ຈັດລຽງເລກທີເຮືອນເປັນໜ່ວຍແຕ່ເລກທີເຮືອນທີ 1 ຫາລກທີເຮືອນສຸດທ້າຍຕາມລຳດັບ.

❖ ແບບຟອມການສຳຫຼວດຄົວເຮືອນ ສຳລັບການສຶກສາຂັ້ນພື້ນຖານ (ຮ່າງທີ 01)

1, ຊື່ບ້ານ:_____ ໂຮງຮຽນ :_____ ເມືອງ:_____, ແຂວງ:_____ ເລກທີເຮືອນ:_____

2, ຊື່ຫົວໜ້າຄອບຄົວ ຫຼື ຜູ້ປົກຄອງເດັກ:_____ ວັນທີ,ເດືອນ,ປີ

ສຳຫຼວດ:_____

3, ໃຫ້ໝາຍ ✓ ໝວດກຸ່ມພາສາ : ☐ ລາວ-ໄຕ , ☐ ມອນ-ຂະແມ , ☐ ຈີນ-ຕິເບດ , ☐ ມົ້ງ-ອິວມ້ຽນ , ☐ ອື່ນໆ , ☐ ຕ່າງດ້າວ

4, ຈຳນວນຄົນໃນຄອບຄົວທັງໝົດ: ຍິງ:_____ຊາຍ: _____

5, ຕາຕະລາງເດັກໃນເກນອາຍຸ 6-14 ປີ ຢູ່ໃນຄອບຄົວ (ໃຫ້ລຽງແຕ່ຜູ້ອາຍຸສູງລົງຫາອາຍຸຕ່ຳ)

6, ຖ້າມີເດັກທີ່ມີອາຍຸ 14 ປີຂຶ້ນໄປແຕ່ຍັງຮຽນໃນຊັ້ນ ປະຖົມກໍ່ໃຫ້ຂຽນໃສ່ໃນຕາຕະລາງນີ້

7, ເປັນຄອບຄົວທຸກຍາກ : ☐ ແມ່ນ, ☐ ບໍ່ແມ່ນ. (ອີງຕາມບັນຊີຂອງບ້ານ)

ວັນທີ,ເດືອນ,ປີ ລົງຕິດຕາມ	
.....	.....

ລ/ດ	ຊື່ແລະນາມສະກຸນ	ວັນ,ເດືອນ,ປີ ເກີດ	ຂັ້ນຮຽນທີ່ ກຳລັງ ຮຽນ ປັດຈຸບັນ	ຊື່ໂຮງຮຽນ	ບໍ່ໄດ້ຮຽນ /ບໍ່ຮຽນຕໍ່ ໃຫ້ໝາຍ ເລກລະ ຫັດໃສ່	ບໍ່ໄດ້ຮຽນ ຕໍ່ໃຫ້ໝາຍ ຂັ້ນຮຽນ ຈົບໃສ່	ຖ້າເປັນເດັກພິການໃຫ້ໝາຍເລກລະຫັດ (ເບີ1, ກາງ, ໜັກ)ໃສ່ຫ້ອງປະເພດພິການ					ໄລຍະຕິດຕາມເດັກທີ່ບໍ່ມາຮຽນ			
												ໄລຍະທີ 1 ເດືອນ 10		ໄລຍະທີ 2 ເດືອນ 2	
							ຮ່າງກາຍ	ຕາ	ຫູ	ປາກ	ສະໝອງ	1	2	1	2
1	2	3	4	5	6	7	8	9	10	11	12	13	14	15	16
1	ທ້າວ ກໍ	31/1/98	ປ.2	ບຸ່ງພ້າວ			1					ປ.2		ປ2	
2	ທ້າວ ຂໍ	1/1/2002	ປ.1	ບຸ່ງພ້າວ	5,6,4	ປ.2					2	ປ.1			ປ1
3	ທ້າວ ຄໍ	23/4/2002			7										

ຊື່ ແລະ ລາຍເຊັນຜູ້ສຳຫລວດ

I. <u>ເຫດຜົນຂອງການບໍ່ໄດ້ເຂົ້າຮຽນ,</u>

1, ເປັນກຳມະກອນຮັບຈ້າງ.
2, ເຮັດວຽກຢູ່ຕະຫຼາດໃນຮ້ານຂາຍເຄື່ອງ.
3, ເຮັດວຽກຊ່ວຍຄອບຄົວ (ໄຮ່, ນາ ..),
4, ໂຮງຮຽນຫ່າງໄກ.
5, ເດັກພິການ.
6, ຄອບຄົວທຸກຍາກ.
7, ຄອບຄົວຍົກຍ້າຍມາໃໝ່.
8, ອ້າຍເອື້ອຍນ້ອງຫຼາຍຄົນ.
9, ອື່ນໆ . . .

II., <u>ມາດຖານກຳນົດປະເພດພິການ,</u>

1, ປະເພດເບີ1.
2, ປະເພດກາງ.
3, ປະເພດໜັກ.

III., <u>ການລົງຕິດຕາມ,</u>

- ໝາຍຂັ້ນຮຽນໃສ່ຫ້ອງທີ 1 ແມ່ນເດັກມາໂຮງຮຽນ.
- ໝາຍຂັ້ນຮຽນໃສ່ຫ້ອງທີ 2 ແມ່ນເດັກບໍ່ມາໂຮງຮຽນ

❖ ຮ່າງເກັບກຳຂໍ້ມູນ ເດັກເກີດໃໝ່ ເຖິງ 05 ປີ (ຮ່າງທີ 02)

1, ຊື່ບ້ານ:_____ ໂຮງຮຽນ :_____ ເມືອງ:_____, ແຂວງ:_____ ເລກທີເຮືອນ:_____

2, ຊື່ຫົວໜ້າຄອບຄົວ ຫຼື ຜູ້ປົກຄອງເດັກ:_____ ວັນທີ,ເດືອນ,ປີ

ສຳຫຼວດ:_____

ລ/ດ	ຊື່ແລະນາມສະກຸນ	ວັນ,ເດືອນ,ປີ ເກີດ	ຂັ້ນຮຽນທີ່ ກຳລັງຮຽນ ປະຈຸບັນ	ຊື່ໂຮງຮຽນ	ຖ້າເປັນເດັກພິການໃຫ້ໝາຍເລກລະຫັດ (ເບີ1, ກາງ, ໜັກ)ໃສ່ຫ້ອງປະເພດພິການ				
					ຮ່າງກາຍ	ຕາ	ຫູ	ປາກ	ສະໝອງ
1	2	3	4	5	6	7	8	9	10
1									
2									
3									
4									
5									
6									
7									
8									
9									

ຊື່ ແລະ ລາຍເຊັນຜູ້ສຳຫລວດ

❖ **ແບບຟອມທີ 3 ສັງລວມສະຖິຕິຂອງໜ່ວຍທີ_____ຊື່ຫົວໜ້າໜ່ວຍ :_____ບ້ານ_____ ອ ດ ປ ສັງລວມ_____**

ເລກທີເຮືອນ	ຊື່ຫົວໜ້າ ຄອບຄົວ	ຄອບຄົວທຸກຍາກ	ຈຳນວນຄົນ								ເດັກເກນອາຍຸ 6-14 ປີ																		ໃຜມີ ຍາດ ເປັນຄົນ ພິການ	
			ລາ-ວຽ	ກະສິ-ກອນ	ຈີນ-ຕ່າງ ປະ	ມ້ຽ-ອື່ນ ໆ	ລັ້ນໆ	ຕ່າງດ້າວ	ລວມ	ຍິງ	ບໍ່ໄດ້ເຂົ້າຮຽນ		ເດັກປົກກະຕິ								ເດັກພິເສດ									
											ລວມ	ຍິງ	ລວມ	ຍິງ	ໄດ້ຮຽນ		ບໍ່ໄດ້ຮຽນ		ຈົບປະຖົມ		ລວມ	ຍິງ	ໄດ້ຮຽນ		ບໍ່ໄດ້ຮຽນ		ຈົບປະຖົມ			
															ລວມ	ຍິງ	ລວມ	ຍິງ	ລວມ	ຍິງ			ລວມ	ຍິງ	ລວມ	ຍິງ	ລວມ	ຍິງ	ພໍ່	ແມ່
1	2	3	4	5	6	7	8	9	10	11	12	13	14	15	16	17	18	19	20	21	22	23	24	25	26	27	28	29	30	31
1																														
2																														
3																														
4																														
5																														
6																														
7																														
8																														
9																														
10																														
11																														
	ລວມທັ້ງໝົດ																													

ເຊັນຜູ້ສັງລວມ

ຂໍ້ແນະນຳ ແບບຟອມທີ 2 : ສັງລວມເປັນໜ່ວຍ ເພື່ອສັງລວມແຕ່ລະຄົວເຮືອນ ມາເປັນສະຖິຕິຂອງໜ່ວຍ ໂດຍຕົວເລກເອົາສະຖິຕິຕ່າງໆຈາກແບບຟອມທີ1

- ການສັງລວມຕ້ອງຂຽນລຳດັບລົງໃຫ້ຖືກຕາມເລກທີເຮືອນແຕ່ນ້ອຍຫາໃຫຍ່
- ຕ້ອງສັງລວມຕົວເລກແຕ່ລະຫ້ອງລົງໃສ່ຫ້ອງສຸດທ້າຍ ເພື່ອໃຫ້ເປັນຕົວເລກສະຖິຕິຂອງໜ່ວຍ,

❖ **ແບບຟອມທີ 4 ສັງລວມສະຖິຕິຂອງບ້ານ_____ ວ ດ ປ ສັງລວມ_____**

ເລກທີໜ່ວຍ	ຊື່ຫົວໜ້າ ໜ່ວຍ	ຄອບຄົວທຸກຍາກ	ຈຳນວນຄົນ								ເດັກເກນອາຍຸ 6-14 ປີ																			
			ລຸ ວ-ໄ ຕ	ສ ະ ໜ ອ ງ ແ ສ ນ	ຈ ຳ-ຕ ິ ເ ນ ດ	ນ ້ ຳ-ອ ິ ວ ມ ງ ຸ	ຂ ໍ ມ ໆ	ຕ ່ ຳ ກ ວ ້ ຳ ດ	ລວມ	ອ ື ່ ນ ໆ	ບ ໍ ່ ໄ ດ ້ ເ ຂ ົ ້ ຳ ຮ ຽ ນ		ເດັກປົກກະຕິ								ເດັກພິເສດ							
											ລວມ	ຍ ິ ງ	ລວມ	ຍ ິ ງ	ໄ ດ ້ ຮ ຽ ນ		ບ ໍ ່ ໄ ດ ້ ຮ ຽ ນ		ຈ ົ ບ ປ ະ ຖ ົ ມ		ລວມ	ຍ ິ ງ	ໄ ດ ້ ຮ ຽ ນ		ບ ໍ ່ ໄ ດ ້ ຮ ຽ ນ		ຈ ົ ບ ປ ະ ຖ ົ ມ	
															ລວມ	ຍ ິ ງ	ລວມ	ຍ ິ ງ	ລວມ	ຍ ິ ງ	ລວມ	ຍ ິ ງ			ລວມ	ຍ ິ ງ	ລວມ	ຍ ິ ງ	ລວມ	ຍ ິ ງ
1	2	3	4	5	6	7	8	9	10	11	12	13	14	15	16	17	18	19	20	21	22	23	24	25	26	27	28	29		
1																														
2																														
3																														
4																														
5																														
6																														
7																														
8																														
9																														
10																														
11																														
	ລວມທັ ງ ໝ ົ ດ																													

<u>ຂໍ້ແນະນຳ ແບບຟອມທີ 3 ສັງລວມເປັນບ້ານ</u>

<u>ເຊັນຜູ້ສັງລວມ</u>

ເພື່ອສັງລວມເປັນສະຖິຕິຂອງບ້ານໃຫ້ຖືກຕ້ອງແລະຊັດເຈນ:

- ຕ້ອງສັງລວມຄືແບບຟອມທີ 2 ແຕ່ໃຫ້ເອົາລຳດັບໜ່ວຍທີ່1 ຫາໜ່ວຍທີສຸດທ້າຍ
  ພ້ອມທັ ງ ຂ ຽ ນ ຊ ື ່ ຫ ົ ວ ໜ ້ າ ໜ ່ ວ ຍ ທ ີ ່ 1,2... ຕ າ ມ ລ ຳ ດ ັ ບ ຫ າ ຊ ື ່ ຫ ົ ວ ໜ ້ າ ທ ີ ່ ສ ຸ ດ ທ ້ າ ຍ

❖ **ຄຳແນະນຳ ການແຕ້ມແຜນທີ່ການສຶກສາ**

ເພື່ອຄວາມເປັນເອກະພາບ ແລະ ເຫັນໄດ້ຂໍ້ມູນຢ່າງຊັດເຈນ ຢູ່ໃນແຜນທີ່ການສຶກສາ:

- ຄພສບ ຕ້ອງເປັນເຈົ້າການໃນການແຕ້ມຕົວຈິງ.
- ເວລາແຕ້ມຕົວຈິງຕ້ອງວາງທິດ, ຂອບເຂດຊາຍແດນ ແລະ ໃສ່ຊື່ເຄື່ອງໝາຍຕາມທີ່ກຳນົດໄວ້ ໃນສັນຍາລັກຢ່າງຊັດເຈນ
- ແຕ່ລະບ້ານຕ້ອງແຕ້ມບ້ານລະແຜນທີ່, ໃນກໍລະນີໂຮມບ້ານຫຼາຍບ້ານເຂົ້າກັນແຕ່ມີນາຍບ້ານ ຜູ້ດຽວແມ່ນໃຫ້ແຕ້ມໂຮມແຜ່ນດຽວກັນ.
- ຖ້າເຮືອນໃດໜຶ່ງ ຫາກໄປປຸກສ້າງໃສ່ຂອບເຂດຂອງບ້ານອື່ນ ກໍໃຫ້ເອົາເຂົ້າມາແຕ້ມໃສ່ແຜນທີ່ຂອງບ້ານຕົນເອງ ໃຫ້ຄິບຕາມຈຳນວນຫຼັງຄາເຮືອນຂອງບ້ານນັ້ນ.
- ຖ້າຫຼັງຄາເຮືອນໜຶ່ງຫາກມີຫລາຍຄອບຄົວຢູ່ນຳກັນ ໃຫ້ແຕ້ມເຮືອນແຝດຕາມຈຳນວນຄອບຄົວ.
- ການແຕ້ມສັນຍາລັກ ເຊັ່ນ: ເຮືອນ, ພູ, ຕົ້ນໄມ້ ຕ້ອງເອົາທີ່ຕັ້ງລົງທາງທິດໃຕ້ກົງກັນຂ້າມ ຕ້ອງປິ່ນແປເຮືອນ, ຈອມພູ, ປາຍໄມ້ ຂຶ້ນທາງທິດເໜືອ
- ການແຕ້ມເຮືອນແຕ່ລະຫຼັງ ຕ້ອງໃຫ້ໃຫຍ່ ຫຼື ນ້ອຍ ສະເໝີກັນ
- ການແຕ້ມສັນຍາລັກເດັກຕ່າງໆ ກໍຕ້ອງແຕ້ມເປັນວົງມົນ ຫຼື ສີ່ຫລ່ຽມເທົ່າກັນການແຕ້ມແຜນທີ່ສັນຍາລັກຕ່າງໆ ບໍ່ຄວນຄິດໄລ່ອັດຕາສ່ວນ

2. ຂັ້ນຕອນການແຕ້ມແຜນທີ່ :

1. ກຽມອຸປະກອນ :

- ເຈ້ຍແຜ່ນໃຫຍ່ , ແພສີຂາວ , ເຟີດສີດຳ , ຟ້າ ,ແດງ , ຂຽວ , ຢາງລົບ , ບັນທັດ , ສໍດຳ, ນ້ຳມຶກ


2. ປະຕິບັດການແຕ້ມຕົວຈິງ :

- ຂຽນຊື່ແຜນທີ່ບ້ານ. . . . . ., ສຶກສຽນ. . . . . .
- ກຳນົດທີ່ຕັ້ງຂອບເຂດຊາຍແດນ, ເສັ້ນທາງ, ຫ້ວຍນ້ຳ, ສຳນັກງານອົງການຕ່າງໆ. (ຕາມເຄື່ອງໝາຍສັນຍາລັກ)
- ແຕ້ມຫລັງຄາເຮືອນ ຕາມຈຳນວນເຮືອນຂອງບ້ານ.
- ຖ້າແມ່ນເຮືອນດຽວແຕ່ ມີຫລາຍສຳມະໂນຄົວໃຫ້ແຕ້ມເຮືອນແປດຽວມີຫລາຍຫ້ອງ.
- ເອົາຂໍ້ມູນເດັກໃສ່ຫລັງຄາເຮືອນ , ໂດຍລຽງຕາມລຳດັບເຮືອນ. (ຕາມແບບຟອມ 1 .)
- ຫລັງຈາກແຕ້ມສຳເລັດແລ້ວ ໃຫ້ລົງວັນທີ . ເດືອນ . ປີ . ທີ່ແຕ້ມ ເຊັນນາຍບ້ານ, ປະທານ ຄພສບ
- ຂຽນເຄື່ອງໝາຍສັນຍາລັກ ແລະ ສະຖິຕິໄວ້ເບື້ອງລຸ່ມທາງຊ້າຍຂອງແຜນທີ່,

3. ການນຳໃຊ້ແຜນທີ່ໃຫ້ເກີດປະໂຫຍດ:

- ຫລັງຈາກແຕ້ມແຜນທີ່ສຳເລັດຢ່າງຮຽບຮ້ອຍແລ້ວ ພວກເຮົາຈະໄດ້ຂໍ້ມູນເດັກຕາມເກນອາຍຸ ໄດ້ເຂົ້າຮຽນ, ບ່ໄດ້ເຂົ້າຮຽນຢ່າງຄົບຖ້ວນ.
- ຈະຊ່ວຍໃຫ້ພວກເຮົາມີຂໍ້ມູນລະອຽດ ແລະ ສະດວກໃນການຂຶ້ນແຜນພັດທະນາການສຶກສາພາຍໃນບ້ານໄດ້, ເປັນຕົ້ນເດັກບ່ໄດ້ເຂົ້າຮຽນ ຄພສບ ຕ້ອງໄດ້ສັງລວມກຸ່ມບັນຫາຂອງເດັກ, ເພື່ອຂຶ້ນແຜນຕາຕະລາງລົງປຸກລະດົມ, ແກ້ໄຂຢູ່ແຕ່ລະຄົວເຮືອນ ໂດຍນຳໃຊ້ຕາຕະລາງວິເຄາະ ຈັດລຽງບັນຫາຂໍ້ມູນ.

❖ **ແຜນທີ່ການສຶກສາບ້ານ**



ຂໍ້ມູນສະຖິຕິ

- ຈຳນວນຫລັງຄາເຮືອນ : 20 ຫລັງ. ຈຳນວນຄອບຄົວສຸກຍາກ: 02 ຫລັງ
- ຈຳນວນຄົນທັງໝົດ: 100 ຄົນ, ຍິງ: 40 ຄົນ.

ສະຖິຕິເດັກອາຍຸ 6 - 14 ປີ																					
ລວມ	ຍິງ	ໄດ້ຮຽນ		ບໍ່ໄດ້ຮຽນ		ເດັກຢາກຮຽນ								ເດັກສຶກສາ							
		ລວມ	ຍິງ	ລວມ	ຍິງ	ລວມ	ຍິງ	ໄດ້ຮຽນ		ບໍ່ໄດ້ຮຽນ		ຈົບປະຖົມແລ້ວ		ລວມ	ຍິງ	ໄດ້ຮຽນ		ບໍ່ໄດ້ຮຽນ		ຈົບປະຖົມແລ້ວ	
								ລວມ	ຍິງ	ລວມ	ຍິງ	ລວມ	ຍິງ			ລວມ	ຍິງ	ລວມ	ຍິງ	ລວມ	ຍິງ
28	10	18	7	3	1	21	9	17	7	2	1	2	1	4	1	1	0	1	0	2	1

❖ ເຄື່ອງໝາຍຕ່າງໆໃນແຜນທີ່

	ສະຖານທີ	ສີ
	ທິດ	ສີດຳ
	ຊາຍແດນບ້ານ	ສີດຳ
	ທາງໃຫຍ່	ສີແດງ
	ທາງຮ່ອມ	ສີແດງ
	ເຮືອນ	ສີດຳ
	ເຮືອນຄອບຄົວທຸກຍາກ	ສີແດງ
	ແມ່ນ້ຳ, ຫ່ວຍ, ຄອງ	ສີຟ້າ
	ຫ້ອງການບ້ານ	ສີດຳ
	ວັດ	ສີແດງ
	ໂຮງໝໍ ຫຼື ສຸກສາລາ	ສີແດງ
	ຮ.ຮ ອະນຸບານ	ສີດຳ
	ຮ.ຮ ປະຖົມສົມບູນ	ສີດຳ
	ຮ.ຮ ປະຖົມມູນ	ສີດຳ
	ຮ.ຮ ມັດທະຍົມຕອນຕົ້ນ	ສີດຳ
	ຮ.ຮ ມັດທະຍົມຕອນປາຍ	ສີດຳ
	ຮ.ຮ ມັດທະຍົມສົມບູນ	ສີດຳ
	ເດັກຍິງປົກກະຕິໄດ້ເຂົ້າຮຽນ	ສີຟ້າ
	ເດັກຍິງພິການໄດ້ເຂົ້າຮຽນ	ສີຟ້າ
	ເດັກຍິງປົກກະຕິບໍ່ໄດ້ເຂົ້າຮຽນ	ສີຟ້າ
	ເດັກຍິງພິການບໍ່ໄດ້ເຂົ້າຮຽນ	ສີຟ້າ
	ເດັກຍິງປົກກະຕິຈົບປະຖົມແລ້ວ	ສີຟ້າ
	ເດັກຍິງພິການຈົບປະຖົມແລ້ວ	ສີຟ້າ
	ເດັກຊາຍປົກກະຕິໄດ້ເຂົ້າຮຽນ	ສີແດງ
	ເດັກຊາຍພິການໄດ້ເຂົ້າຮຽນ	ສີແດງ
	ເດັກຊາຍປົກກະຕິບໍ່ໄດ້ເຂົ້າຮຽນ	ສີແດງ
	ເດັກຊາຍພິການບໍ່ໄດ້ເຂົ້າຮຽນ	ສີແດງ
	ເດັກຊາຍປົກກະຕິຈົບປະຖົມແລ້ວ	ສີແດງ
	ເດັກຊາຍພິການຈົບປະຖົມແລ້ວ	ສີແດງ
	ປ່າໄມ້	ສີຂຽວ
	ພູ	ສີຂຽວ
	ທົ່ງນາ	ສີຟ້າ

❖ ບັນຊີຊື່ເຜົ່າ ຕ່າງໆ ຕາມກຸ່ມພາສາ

ລະຫັດເຜົ່າ	ກຸ່ມພາສາ	ຊື່ເຜົ່າ	ຊື່ເຜົ່າຍ່ອຍ
01	ລາວ-ໄຕ	ລາວ	ລາວ, ພວນ, ກະເລິ້ງ, ໂຍຍ, ຍໍ
02	ລາວ-ໄຕ	ໄຕ	ໄຕດຳ, ໄຕແດງ, ໄຕຂາວ, ໄຕເມີຍ, ໄທແມນ, ໄຕແຖງ, ໄຕແອດ, ໄຕໂສມ
03	ລາວ-ໄຕ	ຜູ້ໄທ	ຜູ້ໄທ, ໄທອ່າງຄຳ, ໄທກະຕະ, ໄທກະປ່ອງ, ໄທສາມເກົ້າ
04	ລາວ-ໄຕ	ລື້	ລື້, ຂຶ(ເຂີນ)
05	ລາວ-ໄຕ	ຍວນ	ຍວນ, ກະລ່ອມ, ງ້ຽວ
06		ຍັ້ງ	ຍັ້ງ
07	ລາວ-ໄຕ	ແຊກ	ແຊກ, ກ້ອຍ
08	ລາວ-ໄຕ	ໄທເໜືອ	ໄທເໜືອ
09	ມອນ-ຂະແມ	ກຶມມຸ	ກຳມຸ, ຂະມຸ, ກະສັກ, ກຶມມຸອູ, ກຶມມຸຍວນ, ກຶມມຸລີ້, ກຶມມຸຄຣອງ, ກຶມມຸຣອກ, ກຶມມຸແຄວນ, ກຶມມຸແມ, ກຶມມຸເຈືອງ, ກຶມມຸອຳ, ມິກໂປຣ, ມິກປຣາງ, ມິກຕາງຈາກ, ມິກກິກ, ມິກຕຸ, ກຣີ, ຍຸມບຣີ, ລາບຣີ, ຕອງເຫລືອງ
10	ມອນ-ຂະແມ	ໄປຣ	ຖິ່, ໄປ, ໄພ, ໄພ່, ລະວາ
11	ມອນ-ຂະແມ	ຊິ້ງມູນ	ຊິ້ງມູນ, ພວກ, ປວກ, ລາວໄໝ້
12	ມອນ-ຂະແມ	ຜ້ອງ	ຜ້ອງ, ຄະນຸ້ງ, ແຟ, ລາ, ຈະປວງ , ຣາດ
13	ມອນ-ຂະແມ	ແທ່ນ	ແທ່, ໄທແທ່ນ
14	ມອນ-ຂະແມ	ເອີດູ	ເອີດູ, ໄທຣາດ
15	ມອນ-ຂະແມ	ບິດ	ບິດ
16	ມອນ-ຂະແມ	ລະແມດ	ລະເມດ
17	ມອນ-ຂະແມ	ສາມຕ່າວ	ສາມເຕົ້າ, ດອຍ
18	ມອນ-ຂະແມ	ກະຕ່າງ	ກະຕ່າງ, ບຣູກະຕາງ, ພະແກ້ວ
19	ມອນ-ຂະແມ	ມະກອງ	ມະກອງ, ມາກອງ, ຕຣຸຍ, ພີ້ວ, ໂຊ, ມາຣ້ອຍ, ຕຣອງ.
20	ມອນ-ຂະແມ	ຕຣິ	ບຣູຕຣິ
21	ມອນ-ຂະແມ	ຍຣຸ	ລະເວນ, ຢູຣຄຣອງ, ຊູ ຫຼື ຢູຣດາກ.
22	ມອນ-ຂະແມ	ຕະຽງ	ຕະຽງ
23	ມອນ-ຂະແມ	ຕະໂອ້ຍ	ຕະໂອ້ຍ, ຣາດິງ, ອີນ, ຍີນຣ
24	ມອນ-ຂະແມ	ແຢະ	ແຢະ
25	ມອນ-ຂະແມ	ເບຣາ	ລະແວ, ລະແວດ, ລຸຍເວ, ກະແວດ ,ຣາວາງ, ແມຣາລອງ, ປາຕີ, ແມປຣາ, ແມ່ຣາບອງ, ແມ່ປລອງ, ແມຕຣາກ, ແມກະຍີ, ແມກຣຸ, ລະມານ
26	ມອນ-ຂະແມ	ກະຕູ	ກະຕູ, ຕຣິວ, ດາກກ້ຽ, ປັນເດ
27	ມອນ-ຂະແມ	ຣາຣັກ	ຣາຣັກ, ອາລັກ, ຣາຕ, ຣະກອງ, ຣະມ້ຽ, ຕາປອງ, ກະເລນ
28	ມອນ-ຂະແມ	ໂອຍ	ໂອຍ, ສະປວນ, ສອກ, ອິທິ, ແມກລອງ , ແມຣີຍາວ

ລະຫັດເຜົ່າ	ກຸ່ມພາສາ	ຊື່ເຜົ່າ	ຊື່ເຜົ່າຍ່ອຍ
29	ມອນ-ຂະແມ	ກຮຽງ	ກຮຽງ, ຈະຕ້ອງ, ເກາະ
30	ມອນ-ຂະແມ	ເຈັ່ງ	ເຈັ່ງ, ເຈັ່ງຫ້ໍ, ເຈັ່ງພອກ ,ເຈັ່ງທ່າລານ.
31	ມອນ-ຂະແມ	ສະດາງ	ສະດາງ, ເຊີດາງ, ກະຍ້ອງ, ສະດາງດວນ
32	ມອນ-ຂະແມ	ຊ່ວຍ	ຊ່ວຍ
33	ມອນ-ຂະແມ	ຍະເຫີ	ຍະເຫີນ, ຕັ່ງແກະ, ເຮີນ
34	ມອນ-ຂະແມ	ລະວີ	ລະວີ, ລາວີ
35	ມອນ-ຂະແມ	ປະໂກະ	ປະໂກະ, ປາໂກະ, ກາໂດ, ກາໄນ
36	ມອນ-ຂະແມ	ຂະແມ	ຂະແມ, ຂອມ, ແຄະ
37	ມອນ-ຂະແມ	ຕຸ້ມ	ຕຸ້ມ, ຕຸ່ມ,ລີຮາ, ຍີຮ່າ, ປ່ອງ, ໄຕຈ່ຳ
38	ມອນ-ຂະແມ	ງວນ	ງວນ, ຂະມຸຍວນ
39	ມອນ-ຂະແມ	ມ້ອຍ	ມ້ອຍ, ເມືອງ
40	ມອນ-ຂະແມ	ກຣີ	ກຣີ, ກິຣ, ອາເຣັມ, ຢຸມປີຣ, ລາບຣີ, ສະລາງ, ອາແລມ, ມະແລງ, ຕອງເຫລືອງ
41	ຈີນ-ທິເບດ	ອາຄາ	ກໍ່, ໂອມາ , ເຄ, ມູເຕີນ, ຈີຈໍ, ປູລີ, ປານາ, ກໍເຟ, ນູກຸຍ, ລູມາ ,ເອີປາ ,ຈີເປຍ ,ມູຈີ ,ຢາເອີ ,ກົງສາດ ,ພູຊາງ
42	ຈີນ-ທິເບດ	ສິງສິລີ	ພູນ້ອຍ, ປີຊູ, ພູຍອດ, ຕາປາດ, ບ້າຕັ້ງ, ຈາຫໍ, ລາວແຊງ, ໄພ, ລາວປາ, ຜົ້ງກູ້ , ຜົ້ງສາດ
43	ຈີນ-ທິເບດ	ລາຫູ	ມູເຊີ , ມູເຊີດຳ , ມຸເຊີຂາວ , ກຸຍສູງ ,ກຸຍຫລວງ
44	ຈີນ-ທິເບດ	ສີລາ	ສີລາ , ສີດາ
45	ຈີນ-ທິເບດ	ຮາຢີ	ຮາຢີ
46	ຈີນ-ທິເບດ	ໂລໂລ	ໂລໂລ , ອາລູ
47	ຈີນ-ທິເບດ	ຫ້ໍ	ຫ້ໍ
48	ມົ້ງ-ອີ້ວມຽນ	ມົ້ງ	ມົ້ງ, ມົ້ງດຳ, ມົ້ງຂາວ, ມົ້ງຂຽວ, ມົ້ງແດງ, ມົ້ງດູ້.
49	ມົ້ງ-ອີ້ວມຽນ	ອີ້ວມຽນ	ຢ້າວ, ລາວຫ້ວຍ, ລາແຕ, ຢ້າວຂາວ, ຢ້າວພົມໄໝແດງ
50	ອື່ນໆ	ອື່ນໆ	ສຳລັບຄົນຊາດອື່ນທີ່ໄດ້ເຂົ້າສັນຊາດລາວແລ້ວ ໃຫ້ໃສ່ລາວ ອື່ນໆ
51	ຕ່າງດ້າວ	ຕ່າງດ້າວ	ສຳລັບຜູ້ທີ່ບໍ່ໄດ້ ເຂົ້າສັນຊາດລາວໃຫ້ໃສ່ຕ່າງດ້າວ.

II. ການຊອກຫາເດັກ ແລະ ເຫດຜົນທີ່ເດັກບໍ່ໄດ້ເຂົ້າໂຮງຮຽນ

ການເຮັດວຽກຮ່ວມກັບເພື່ອນຫຼືນັກຮຽນຂອງທ່ານນັ້ນ, ທ່ານສາມາດກຳນົດໄດ້ວ່າມີເດັກຄົນໃດແດ່ ໃນຊຸມຊົນຂອງທ່ານທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ບາງເທື່ອ ທ່ານຍັງອາດເຄີຍລະດົມສະໝອງ ກ່ຽວກັບບາງເຫດຜົນວ່າ ສິ່ງນີ້ມັນອາດເກີດຂຶ້ນໄດ້ຍ້ອນອັນໃດ. ຄຳຖາມທີ່ສຳຄັນທີ່ຈຳເປັນຕ້ອງໄດ້ຮັບຄຳຕອບໃນປະຈຸບັນແມ່ນ: “ປັດໃຈໃຫຍ່ໆທີ່ສຳຄັນອັນໃດແດ່ ທີ່ເຮັດໃຫ້ເດັກບໍ່ໄດ້ເຂົ້າໂຮງຮຽນ ແລະ ໂດຍສະເພາະເມື່ອ ສົມທຽບກັບເດັກທີ່ສາມາດເຂົ້າໂຮງຮຽນ? ”

ຕາມທີ່ເຮົາໄດ້ຮຽນຮູ້ກ່ອນໜ້ານີ້ປັດໄຈບາງຢ່າງອາດສາມາດເຫັນໄດ້ ເຊັ່ນ: ຄວາມເປັນພິການດ້ານຮ່າງກາຍ, ອິນຊີສຳຜັດ ຫຼື ສະຕິປັນຍາ; ປັດໄຈທີ່ເຫັນໄດ້ຍາກກວ່າ ເຊັ່ນ: ການດູແລທີ່ບໍ່ເໝາະສົມ ຫຼື ການຂາດໂພຊະນາການ; ຫຼືພ້ອມທັງປັດໄຈເຊິ່ງເປັນທີ່ຍອມຮັບກັນ ແລະ ປັດໄຈທີ່ບໍ່ຮູ້ສຶກໄດ້ຢ່າງກວ້າງຂວາງ ເຊັ່ນ ບົດບາດຍິງ-ຊາຍ ຫຼື ຄວາມຮັບຜິດຊອບຂອງເດັກຢູ່ໃນຄອບຄົວຂອງເຂົາ.

ຕົວຢ່າງແບບສອບຖາມຊີວະປະຫວັດເດັກ

1. ຊື່ ແລະ ນາມສະກຸນເດັກ_____ເພດ_____ອາຍຸ_____ ທີ່ຢູ່_____ເຊື້ອຊາດ_____ສັນຊາດ_____ສາດສະໜາ_____ ວັນເດືອນປີເກີດ_____ບ້ານເກີດ_____ຂຶ້ນທະບຽນການເກີດ:_____ໄດ້ຂຶ້ນ _____ບໍ່ໄດ້ຂຶ້ນ_____(ໃຫ້ກວດເບິ່ງ)

2. ຊື່ພໍ່_____ອາຍຸ_____ປີ,ຍັງມີຊີວິດຢູ່_____ເສຍຊີວິດ ແລ້ວ_____

3. ຊື່ແມ່_____ອາຍຸ_____ປີ, ຍັງມີຊີວິດຢູ່_____ເສຍຊີວິດແລ້ວ_____

4. ສະພາບຂອງຄອບຄົວພໍ່ແມ່ (ໃຫ້ຂີດອ້ອມ): ຢູ່ຮ່ວມກັນ ເປັນໝ້າຍ ເປັນຮ້າງ ແຍກກັນຢູ່

5. ເດັກອາໄສຢູ່ນຳຜູ້ໃດ (ໃຫ້ຂີດອ້ອມ): ຢູ່ນຳພໍ່ແລະແມ່ ຢູ່ນຳແມ່ ຢູ່ນຳພໍ່ ຢູ່ນຳຜູ້ອື່ນໆ(ໃຫ້ລະບຸ)_____

6. ໃຫ້ຂຽນລາຍຊື່ທຸກຄົນທີ່ອາໄສຢູ່ໃນເຮືອນຫຼັງດຽວກັນ (ກະລຸນາຕື່ມຂໍ້ມູນລົງໃສ່ຕາລາງລຸ່ມນີ້)

ສະມາຊິກຄອບຄົວ	ເພດ		ອາຍຸ	ລະດັບການສຶກສາ(ໃຫ້ໝາຍໃສ່ຊ່ອງລະດັບການສຶກສາສູງສຸດຂອງແຕ່ລະຄົນ)						ສາຍສຳພັນກັບເດັກ	ອາຊີບ(ໃຫ້ລະບຸ)	
ຊື່	ຊ	ຍ		ບໍ່ໄດ້ຮຽນ	ປະຊາສຶກສາ	ອະນຸ ບານ	ປະຖົມ	ມັດທະຍົມ	ວິທະຍາໄລ		ຕົ້ນຕໍ	ສຳຮອງ

7. ພໍ່ແມ່ ຫຼື ຄອບຄົວຂອງເດັກເຄີຍອົບພະຍົບ ຫຼືບໍ່? (ໃຫ້ຂີດອ້ອມ ເຄີຍ ຫຼື ບໍ່ເຄີຍ; ແລະ ຕື່ມຂໍ້ມູນທີ່ເໝາະສົມໃສ່)
   ພໍ່ ເມື່ອໃດ_____ (ກະລຸນາບອກ ເດືອນ ແລະ ປີ)

ເຄີຍຍ້າຍ ໄປທີ່: ເມືອງ;_____ ແຂວງ_____ ປະເທດ_____

ດົນປານໃດ_____ (ໃຫ້ລະບຸຈຳນວນປີ ແລະເດືອນ) ບໍ່ເຄີຍ

ແມ່ ເມື່ອໃດ_____ (ກະລຸນາບອກ ເດືອນ ແລະ ປີ)

ເຄີຍ ຍ້າຍໄປທີ່: ເມືອງ;_____ ແຂວງ_____ ປະເທດ_____

ດົນປານໃດ_____(ໃຫ້ລະບຸຈຳນວນປີ ແລະເດືອນ) ບໍ່ເຄີຍ

ຄອບຄົວ ເມື່ອໃດ_____(ກະລຸນາບອກ ເດືອນ ແລະ ປີ)

ເຄີຍ ຍ້າຍໄປທີ່: ເມືອງ;_____ ແຂວງ_____ ປະເທດ_____

ດົນປານໃດ_____(ໃຫ້ລະບຸຈຳນວນປີ ແລະເດືອນ) ບໍ່ເຄີຍ

8. ລາຍໄດ້ຂອງຄອບຄົວຕໍ່ເດືອນ (ໃຫ້ຂີດອ້ອມໃສ່)

ຕ່ຳກວ່າ 270.000 ກີບ

ລະຫວ່າງ 270.000 - 675.000 ກີບ

ລະຫວ່າງ 675.000 - 1.350.000 ກີບ

ລະຫວ່າງ 1.350.000 - 2.160.000 ກີບ

ລະຫວ່າງ 2.160.000 - 2.700.000 ກີບ

ຫຼາຍກວ່າ 2.700.000 ກີບ

9. ເດັກກ່ອນໄວຮຽນທີ່ຕ້ອງດູແລ

ຈຳນວນເດັກກ່ອນໄວຮຽນໃນຄອບຄົວທີ່ບໍ່ໄດ້ເຂົ້າໂຮງຮຽນ ມີຈັກຄົນ?_____

ໃຜເປັນຜູ້ດູແລເດັກເຫຼົ່ານີ້ໃນແຕ່ລະວັນ?

ພໍ່ແມ່_____ ພີ່ນ້ອງ(ໃຫ້ລະບຸ)_____

ສູນດູແລເດັກຊຸມຊົນ_____ສະຖານທີ່ຮັບລ້ຽງເດັກ_____

ອື່ນໆ (ໃຫ້ລະບຸ)_____

10. ສະພາບເສດຖະກິດຄອບຄົວຂອງເດັກ

ຄອບຄົວຂອງເດັກມີທີ່ດິນເພື່ອສ້າງລາຍຮັບ (ບໍ່ນັບທີ່ດິນບ່ອນເຮືອນຕັ້ງຢູ່) ບໍ່?

ຖ້າມີ: ເປັນເຈົ້າຂອງທີ່ດິນ_____ເຮັກຕາ

ເຊົ່າ_____ ເຮັກຕາ

ເປັນຂອງຄອບຄົວ_____ ເຮັກຕາ

ບໍ່ມີ:_____

ອື່ນໆ (ໃຫ້ລະບຸ):_____

ຄອບຄົວຂອງເດັກມີເຮືອນຢູ່ ບໍ່?

ມີ_____ ບໍ່ມີ_____

ຖ້າມີ: ເປັນເຈົ້າຂອງ_____ ເຊົ່າ_____

ລັກສະນະຂອງເຮືອນຢູ່ (ໃຫ້ລະບຸ)_____

11. ລະຍະທາງຈາກເຮືອນເຖິງໂຮງຮຽນ ແລະ ພາຫະນະເດີນທາງ

ລະຍະທາງຈາກເຮືອນເຖິງໂຮງຮຽນ ໄກສ່ຳໃດ? _____(ໃຫ້ລະບຸ ຈັກແມັດ ຫຼື ກິໂລແມັດ)

ໃຊ້ເວລາດົນປານໃດເພື່ອເດີນທາງຈາກເຮືອນ ເຖິງ ໂຮງຮຽນ?_____(ໃຫ້ລະບຸຈັກນາທີຈັກຊົ່ວໂມງ)

ພາຫະນະຊະນິດໃດທີ່ເດັກໃຊ້ໄປໂຮງຮຽນ? (ໃຫ້ຂີດອ້ອມໃສ່)

ຍ່າງ	ລົດໃຫຍ່	ລົດຈັກ
ລົດຖີບ	ລົດສາມລໍ້	ລົດເມ

ອື່ນໆ (ໃຫ້ລະບຸ)_____

12. ເຄີຍມີສະມາຊິກໃນຄອບຄົວອອກໂຮງຮຽນ ຫຼືບໍ່?_____ ເຄີຍມີ_____ບໍ່ເຄີຍມີ

ຖ້າເຄີຍມີ, ຍ້ອນສາເຫດອັນໃດ_____

13. ເຄີຍມີສະມາຊິກຄອບຄົວ ໄປເຂົ້າໂຮງຮຽນບໍ່?_____ເຄີຍ_____ບໍ່ເຄີຍ;

ຖ້າເຄີຍໄປເຂົ້າໄດ້ດົນປານໃດ_____

14. ເຄີຍມີສະມາຊິກຄອບຄົວອອກໂຮງຮຽນບໍ່?_____ ____ເຄີຍ_____ບໍ່ເຄີຍ

ຖ້າເຄີຍ, ອອກດົນປານໃດ_____

ຖ້າເຄີຍ, ຍ້ອນສາເຫດອັນໃດ_____

15. ຄອບຄົວເປັນສະມາຊິກຂອງອົງການຈັດຕັ້ງພັດທະນາຊຸມຊົນໃດໜຶ່ງ ບໍ່?_____ເປັນ____ບໍ່ເປັນ

ກະລຸນາບອກຊື່ອົງກອນ_____

16. ເດັກໄດ້ຮັບການຊ່ວຍເຫຼືອດ້ານການເງິນແບບໃດໜຶ່ງບໍ່ ເພື່ອເຂົ້າໂຮງຮຽນ?_____ໄດ້_____ບໍ່ໄດ້

ຖ້າໄດ້, ໄດ້ມາຈາກໃສ (ໃຫ້ລະບຸ)_____

17. ຖ້າເດັກເຄີຍໄປໂຮງຮຽນ, ເດັກຂາດໂຮງຮຽນເລື້ອຍບໍ່?_____ຂາດ_____ບໍ່ຂາດ

ຖ້າຂາດ, ຍ້ອນຫຍັງ_____

18. ຖ້າເດັກເຄີຍເຂົ້າໂຮງຮຽນ, ລາວເຄີຍເສັງບໍ່ໄດ້ໃນບາງວິຊາເລື້ອຍໆສ່ຳໃດ?

ບໍ່ເຄີຍ_____

ບໍ່ເກີນ 25%_____

26 – 25%_____

ຫຼາຍກວ່າ 50%_____

19. ເດັກມີພາວະຂາດສານອາຫານ ຫຼືບໍ່(ຈ່ອຍ ຫຼື
ເຕ້ຍເກີນໄປເມື່ອທຽບໃສ່ອາຍຸ)?____ຂາດ____ບໍ່ຂາດ

20. ເດັກໄດ້ຮັບໂຄງການອາຫານກາງເວັນ ບໍ່?_____ ໄດ້_____ບໍ່ໄດ້
ເດັກໄດ້ກິນອາຫານທ່ຽງປົກກະຕິ ບໍ່? _____ໄດ້ກິນ_____ບໍ່ໄດ້ກິນ

21. ເດັກເປັນພິການຊະນິດໃດໜຶ່ງບໍ່? (ຖ້າເປັນ,
ໃຫ້ລະບຸ_____

22. ເດັກໄດ້ຮັບຜົນກະທົບຈາກການຕິດພະຍາດຊໍາເຮື້ອ ບໍ່?
ຖ້າຕິດ, ໃຫ້ລະບຸ_____, ຫຼື
ເລື້ອງນີ້ຕ້ອງປິດເປັນຄວາມລັບບໍ່?_____ເປັນຄວາມລັບ

ຄໍາຖາມ

1. ການສ້າງແຜນທີ່ໂຮງຮຽນ - ຊຸມຊົນລວມມີຈັກຂັ້ນຕອນ ຄືຂັ້ນຕອນໃດແດ່ ?
2. ເດັກມີສ່ວນຮ່ວມແນວໃດໃນການສ້າງແຜນທີ່ຂອງໂຮງຮຽນ - ຊຸມຊົນ?
3. ຈົ່ງບອກເຫດຜົນທີ່ເດັກບໍ່ໄດ້ເຂົ້າໂຮງຮຽນ

ບົດທີ 9: ການປະຕິບັດການເພື່ອນຳເອົາເດັກທຸກຄົນເຂົ້າໂຮງຮຽນ

1. ການວາງແຜນປະຕິບັດ

ຢູ່ໃນເຄື່ອງມືທີ່ຜ່ານມາ, ພວກເຮົາໄດ້ນຳໃຊ້ແຜນທີ່ໂຮງຮຽນ-ຊຸມຊົນ ເພື່ອວາງຕຳແໜ່ງ ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນວ່າເຂົາຢູ່ໃສ. ພວກເຮົາໄດ້ສ້າງແຜນທີ່ ໂດຍການຊ່ວຍເຫຼືອຂອງສະມາຊິກຊຸມຊົນ ຫຼື ນັກຮຽນເອງແລ້ວແລກປ່ຽນຂໍ້ມູນກັບຜູ້ອື່ນໆ. ພວກເຮົາຍັງໄດ້ເກັບກຳເອົາຂໍ້ມູນຂ່າວສານ ກ່ຽວກັບເດັກຜູ້ທີ່ບໍ່ໄດ້ເຂົ້າໂຮງຮຽນ, ໄດ້ສ້າງແຟ້ມຊີວະປະຫວັດເດັກ ແລະ ກຳນົດອຸປະສັກບາງຢ່າງທີ່ເປັນສິ່ງກີດກັ້ນໃຫ້ເຂົາບໍ່ມາໂຮງຮຽນ. ໃນເວລານີ້, ພວກເຮົາຈຳເປັນຕ້ອງເລີ້ມປະຕິບັດການຍົກຍ້າຍອຸປະສັກທີ່ເປັນສິ່ງກີດຂວາງເຫຼົ່ານີ້ອອກໄປ. ເພື່ອທີ່ຈະປະຕິບັດໄດ້, ທ່ານສາມາດຕິດຕາມບາດກ້າວຕ່າງໆຂ້າງລຸ່ມ ແລະ ສ້າງແຜນປະຕິບັດທີ່ມີປະສິດທິຜົນ[1]. ຂະບວນການດັ່ງກ່າວ ແມ່ນຄ້າຍຄືກັນກັບສິ່ງທີ່ໄດ້ອະທິ ບາຍໃນເອກະສານຂອງຊຸດເຄື່ອງມືນີ້ ກ່ຽວກັບຂັ້ນຕອນການວາງແຜນສຳລັບສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເພື່ອນມິດໃນການຮຽນຮູ້. ເຖິງຢ່າງໃດກໍຕາມ, ເຄື່ອງມືຕໍ່ໄປນີ້ໄດ້ຖືກປັບ ໃຊ້ສຳລັບ ທ່ານ ເພື່ອລິເລີ້ມວຽກງານ ໂດຍສະເພາະແມ່ນເພື່ອທີ່ຈະກຳຈັດສິ່ງກີດຂວາງຕໍ່ການເຂົ້າຮຽນ ແລະ ນຳເອົາເດັກທຸກຄົນ ເຂົ້າສຶກສາໃນໂຮງຮຽນ.

ກ. ປະກອບທີມງານ ທີ່ຈະຊ່ວຍທ່ານເພື່ອສະທ້ອນຂໍ້ມູນທີ່ເກັບມາ ໂດຍຜ່ານແຜນທີ່ໂຮງຮຽນຊຸມຊົນ ແລະ ແຟ້ມຊີວະປະຫວັດເດັກ ເພື່ອຈະວາງແຜນປະຕິບັດການທີ່ເໝາະສົມ. ທີມງານນີ້ ອາດເປັນຄົນດຽວກັນກັບຜູ້ທີ່ມີສ່ວນຮ່ວມ ໃນຂະບວນການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເພື່ອນມິດໃນການຮຽນຮູ້ທີ່ອະທິບາຍຢູ່ໃນເອກກະສານເຫຼັ້ມນີ້, ຫຼື ຜູ້ທີ່ມີສ່ວນຮ່ວມ ໂດຍສະເພາະ ໃນການສ້າງແຜນທີ່.ອີກທາງເລືອກໜຶ່ງ ທ່ານອາດຕ້ອງການຂະຫຍາຍທີມງານອອກ ດ້ວຍການບັນຈຸຜູ້ອື່ນໆທີ່ຈະຊ່ວຍໄດ້ຫຼາຍທີ່ສຸດ ໃນການວາງແຜນ ໂດຍສະເພາະການດຳເນີນການປະຕິບັດ.

ຂ. ແບ່ງທີມງານເປັນກຸ່ມ ອີງຕາມພາລະບົດບາດ ຫຼື ຄວາມສົນໃຈ ຕົວຢ່າງ: ຄູສອນ, ສະມາຊິກສະຫະພັນແມ່ຍິງ, ຜູ້ນຳຊຸມຊົນ, ເດັກນັກຮຽນ, ບຸກຄົນທີ່ມາຈາກພາກເອກະຊົນ ແລະ ອື່ນໆ.

---

[1] *Adopted from: Toolkit for Assessing and Promoting Equity in Classroom, produced by Wendy Rimer et al. Edited by Marta S. Maldonado and Angela Aldave. Creative Associates International Inc., USAID/EGAT/WID, Washington DC. 2003.*

ຄ. ແຕ່ລະກຸ່ມຄວນລະດົມສະໝອງ ເພື່ອລຽງລຳດັບສິ່ງທີ່ຈະສາມາດປະຕິບັດ ເພື່ອນຳເອົາເດັກທຸກຄົນມາເຂົ້າໂຮງຮຽນ ເພື່ອຮຽນຮູ້. ແຕ່ລະກຸ່ມຄວນພິຈາລະນາຄົ້ນຄວ້າ ຂໍ້ຫຍຸ້ງຍາກ ຫຼື ສິ່ງທີ່ທ້າທາຍໃນເວລາປະຕິບັດໃນແຕ່ລະຢ່າງ. ອັນໃດທີ່ພໍຈະປະຕິບັດໄດ້ສຳເລັດຜົນ? ອັນໃດທີ່ຈະເປັນອຸປະສັກໃນການດຳເນີນການແຕ່ລະຢ່າງ? ຈະຫຼີກລ່ຽງອຸປະສັກໄດ້ຢ່າງໃດ? ເພື່ອທີ່ຈະຫຼີກລ້ຽງການອອກແບບແຜນປະຕິບັດທີ່ຫຼົ້ມເຫຼວ, ການພິຈາລະນາຄົ້ນຄວ້າ ໃຫ້ເຫັນອຸປະສັກເຫຼົ່ານີ້ຖືເປັນເລື່ອງສຳຄັນທີ່ສຸດ.

ງ. ເມື່ອແຕ່ລະກຸ່ມໄດ້ຕັດສິນໃຈ ທີ່ຈະໃຊ້ແຜນປະຕິບັດການບາງຢ່າງ ເພື່ອນຳເດັກເຫຼົ່ານີ້ເຂົ້າໂຮງຮຽນແລ້ວ,ໃຫ້ຮຽກເອົາທຸກກຸ່ມກັບຄືນມາຮວມກັນເພື່ອແລກປ່ຽນຄວາມຄິດຄວາມເຫັນ.ໃນການເຮັດວຽກຮ່ວມກັນ, ໃຫ້ກຳນົດວ່າການປະຕິບັດການອັນໃດແດ່ທີ່ອາດສາມາດນຳໄປດຳເນີນການ ໃນພາກປະຕິບັດ ໄດ້ໂດຍໃຫ້ພິຈາລະນາຄົ້ນຄວ້າ ປະເດັນບັນຫາ ດັ່ງຕໍ່ໄປນີ້ ລວມທັງປະເດັນອື່ນໆ ທີ່ທ່ານຄິດວ່າເໝາະສົມ.

- ການປະຕິບັດການອັນໃດທີ່ຈະສາມາດມີຜົນຕໍ່ເດັກສ່ວນໃຫຍ່ຫຼາຍທີ່ສຸດ, ຫຼື ອັນໃດຄວນ ໃຫ້ເປັນບູລິມະສິດໃນສະຖານະການສະເພາະຂອງທ່ານ? ທ່ານຍັງອາດຕ້ອງເລີ້ມດ້ວຍ ການຈັດບູລິມະສິດ ສິ່ງທີ່ຈະກະທຳ ຫຼື ປະຕິບັດ ຖ້າຈຳເປັນ.
- ມີປະຕິບັດການອັນໃດບໍ່ທີ່ຄ້າຍຄືກັນລະຫວ່າງກຸ່ມ ທີ່ທ່ານສາມາດລວມເຂົ້າກັນ? ການເຮັດວຽກຮ່ວມກັນ ໃນສິ່ງທີ່ຈະປະຕິບັດແບບຄ້າຍຄືກັນນັ້ນ ຈະຊ່ວຍເພີ້ມຄວາມພະຍາຍາມ, ປະຢັດຊັບພະຍາກອນ ແລະ ເພີ້ມທະວີຂີດຄວາມສາມາດ ເພື່ອຄວາມສຳເລັດ.
- ປະຕິບັດການທີ່ມີຂີດຄວາມສາມາດອັນໃດ ທີ່ສະແດງອອກວ່າຈະມີແນວໂນ້ມສູ່ຜົນສຳເລັດກ່ອນໝູ່ ແລະ ຄວນທີ່ຈະເລີ້ມເປັນໂຕທຳອິດ? ຍຸດທະສາດທີ່ດີທີ່ສຸດແມ່ນເລີ້ມຕົ້ນຈາກງ່າຍ ເພື່ອບັນລຸຜົນສຳເລັດແລ້ວ ຈຶ່ງກ້າວໄປສູ່ການປະຕິບັດສິ່ງທີ່ຍາກຂຶ້ນ. ຖ້າເວົ້າແບບສັ້ນໆ ແມ່ນສ້າງຂຶ້ນບົນຄວາມສຳເລັດຜົນ. ຍົກຕົວຢ່າງ, ມັນອາດເປັນການດີກວ່າທີ່ຈະເລີ້ມ ໂດຍການເຮັດໃຫ້ໂຮງຮຽນ ເຊິ່ງເດັກພິການສາມາດເຂົ້າເຖິງແລ້ວຈຶ່ງກ້າວໄປສູ່ບັນຫາທີ່ຫຍຸ້ງຍາກກວ່າຄືການປັບປຸງທັດສະນະຄະຕິ ຕໍ່ການມີເດັກພິການໃນຫ້ອງຮຽນ.
- ການປະຕິບັດການອັນໃດທີ່ອາດສາມາດນຳໃຊ້ຊັບພະຍາກອນທີ່ມີຢູ່? ອັນໃດທີ່ຕ້ອງການຄວາມຊ່ວຍເຫຼືອຈາກຂ້າງນອກ? ເພື່ອຈະໄດ້ມາຊັບພະຍາກອນຈາກຂ້າງນອກນັ້ນ, ສ່ວນໃຫຍ່ຈຳເປັນຕ້ອງສະແດງ ໃຫ້ຜູ້ບໍລິຈາກເຫັນວ່າ ທ່ານ ພວມປະຕິບັດງານຢ່າງສຸດຄວາມສາມາດ ໂດຍນຳໃຊ້ຊັບພະຍາກອນທີ່ທ່ານມີຢູ່. ເພາະສະນັ້ນ, ຈຶ່ງເລີ້ມຕົ້ນດ້ວຍສິ່ງທີ່ທ່ານສາມາດເຮັດໄດ້, ໃນຂະນະດຽວ ກັນກັບການຂໍການຊ່ວຍເຫຼືອທີ່ຈຳເປັນຈາກຜູ້ອື່ນ ເພື່ອທີ່ຈະໄດ້ດຳເນີນງານອື່ນໃນຂັ້ນຕໍ່ໄປ.

ຈ. ທຸກຄົນຄວນເຮັດວຽກຮ່ວມກັນ ເພື່ອສ້າງແຜນສຳລັບປະຕິບັດການທີ່ໄດ້ຕັດສິນໃຈໄວ້ ໃນຂ້າງເທິງແຜນປະຕິບັດການເຫຼົ່ານີ້ ຄວນບັນຈຸອົງປະກອບ ດັ່ງຕໍ່ໄປນີ້:

- ຈຸດປະສົງທີ່ທ່ານຕ້ອງການບັນລຸເຊັ່ນ: ການເພີ້ມທະວີການເຂົ້າເຖິງໂຮງຮຽນຂອງເດັກ ທີ່ມີ ພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ.
- ບັນດາຍຸດທະສາດ ຫຼື ວິທີການທີ່ຈຳເປັນເພື່ອດຳເນີນກິດຈະກຳຕ່າງໆ ເຊັ່ນ: ການ ປະຊຸມ ຮ່ວມກັບຜູ້ປົກຄອງເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ເພື່ອຊອກຫາຄວາມຕ້ອງການທີ່ຈຳເປັນຂອງເດັກ; ຕິດຕາມດ້ວຍການປະຊຸມຮ່ວມ ກັບຜູ້ບໍລິຫານໂຮງຮຽນ ແລະ ຄູເພື່ອປະເມີນເບິ່ງອາຄານສະຖານທີ່ໂຮງຮຽນ ແລະ ກິດຈະກຳອັນໃດ ທີ່ຄວນດຳເນີນການ ເພື່ອເຮັດໃຫ້ເຂົ້າເຖິງໄດ້ງ່າຍຂຶ້ນ ແລະ ເປັນ ເພື່ອນມິດໃນການ ຮຽນຮູ້.
- ບັນດາກິດຈະກຳສະເພາະແລະເວລາຂອງມັນດັ່ງທີ່ໄດ້ກ່າວມາເຖິງຂ້າງເທິງນັ້ນ.
- ເປົ້າໝາຍທີ່ທ່ານ ພະຍາຍາມຈະເຂົ້າເຖິງ(ເຊັ່ນ: ພໍ່ແມ່ຜູ້ປົກຄອງເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ແລະ ພວກກຸ່ມເດັກເອງ) ແລະ ບັນດາຜູ້ຄົນ ທີ່ມີສ່ວນຮ່ວມ ໃນກິດຈະກຳຕ່າງໆ (ຜູ້ບໍລິຫານໂຮງຮຽນ, ຄູ, ສະມາຄົມພໍ່ແມ່ນັກ ຮຽນ, ນັກຮຽນ, ...).
- ຊັບພະຍາກອນອັນໃດແດ່ທີ່ທ່ານຈະຈຳເປັນໃຊ້ແລະຈະສາມາດຫາມາໄດ້ຢ່າງໃດ.
- ມີມາຕະການອັນໃດແດ່ ທີ່ຈະໃຊ້ ເພື່ອປະເມີນຜົນສຳເລັດແຜນປະຕິບັດງານຂອງ ທ່ານ (ຕົວຢ່າງ: ເດັກທຸກຄົນໄດ້ເຂົ້າໂຮງຮຽນ).

ສ. ໂດຍສະເພາະຢ່າງຍິ່ງ, ຖ້າມີຫຼາຍທີມຈະເຮັດວຽກຕາມແຜນປະຕິບັດທີ່ແຕກຕ່າງກັນ, ຕ້ອງໃຫ້ແນ່ໃຈວ່າພວກເຂົາຈະມີໂອກາດແລກປ່ຽນປະສົບການນຳກັນ.ໂອກາດຕ່າງໆ ອາດຈະ ເກີດຂຶ້ນເພື່ອເຊື່ອມໂຍງບັນດາແຜນປະຕິບັດການລະຫວ່າງທີມງານ.

ຊ. ໃຫ້ໂອກາດແກ່ທຸກໆທີມງານ ເພື່ອທວນຄືນເບິ່ງສິ່ງທີ່ພວກເຂົາພວມເຮັດຢູ່; ເພື່ອສະ ທ້ອນຄືນສິ່ງທີ່ພວມເປັນຢູ່ ຫຼື ໄດ້ເປັນໄປແລ້ວ, ໄດ້ເຮັດແລ້ວ ແລະ ເພື່ອປະເມີນລະ ດັບຄວາມສຳເລັດ (ອັນໃດເຮັດໄດ້ດີ, ອັນໃດເຮັດບໍ່ໄດ້). ໃຫ້ໃຊ້ຂໍ້ມູນຂ່າວສານນີ້ຕັດ ສິນໃຈວ່າຈະສືບຕໍ່ ກິດຈະກຳທີ່ວາງແຜນໄວ້ ຫຼືບໍ່ ຫຼື ຈະຕ້ອງປ່ຽນແປງມັນ, ແລ້ວ ຈຶ່ງນຳໃຊ້ສິ່ງທີ່ຕັດສິນໃຈນັ້ນ (ເຮັດເລີຍ!).

2. ແນວຄວາມຄິດເພື່ອປະຕິບັດການ

ພາກນີ້ແມ່ນພາກກ່ຽວກັບ **"ຕົ້ນກຳເນີດຂອງແນວຄວາມຄິດ"**. ຈະເບິ່ງແບບສັ້ນໆບາງອຸ ປະສັກກິດຂວາງທີ່ສຳຄັນຕໍ່ການຮຽນຮ່ວມທີ່ພວກເຮົາໄດ້ສົນທະນາກັນກ່ອນໜ້ານີ້, ຈາກນັ້ນ, ຈະ ນຳສະເໜີແນວຄວາມຄິດ ກ່ຽວກັບວິທີທີ່ອາດສາມາດລິເລີ້ມເອົາຊະນະມັນ ໂດຍອີງໃສ່ປະສົບ

ການຂອງໂຮງຮຽນ ແລະ ຊຸມຊົນທີ່ພວມເຮັດວຽກສົ່ງເສີມການຮຽນຮູ້ແບບຮຽນຮ່ວມ. ນີ້ເປັນແນວຄວາມຄິດຕ່າງໆ ທີ່ທ່ານຄວນນຳມາພິຈາລະນາຄົ້ນຄວ້າແລະເສີມຂະຫຍາຍ ອີງໃສ່ສະພາບຕົວຈິງຂອງທ່ານເອງ. ມັນຍັງສາມາດນຳໃຊ້ເປັນຈຸດເລີ້ມຕົ້ນ ສຳລັບການວາງແຜນປະຕິບັດການດ້ວຍ

2.1. ສະພາບແວດລ້ອມຂອງເດັກ

ກ. ການລົງທະບຽນການເກີດ.

ເດັກທີ່ບໍ່ມີໃບຢັ້ງຢືນການເກີດ ອາດບໍ່ສາມາດເຂົ້າໂຮງຮຽນໄດ້ ຫຼື ອາດສາມາດເຂົ້າໂຮງຮຽນ ໃນເວລາທີ່ຈຳກັດບໍ່ພໍເທົ່າໃດປີ. **ພວກເຮົາຈະສາມາດເຮັດຫຍັງໄດ້ແດ່ ເພື່ອຊ່ວຍເດັກ ເຫຼົ່ານີ້?**

- ໃຫ້ເຮັດວຽກຮ່ວມກັບຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນເພື່ອດຳເນີນ "ການນຳພາການ ລົງທະບຽນການເກີດ" ປະຈຳປີເພື່ອໃຫ້ເດັກທຸກຄົນມີໃບຢັ້ງຢືນການເກີດ.

- ພົວພັນກັບສຸກສາລາຊຸມຊົນ ແລະ ໂຮງໝໍເພື່ອເຮັດວຽກຮ່ວມກັບເຂົາເຈົ້າໃນການພັດທະນາຍຸດທະສາດ ທີ່ຈະຊຸກຍູ້ໃຫ້ພໍ່ແມ່ທີ່ເກີດລູກໃໝ່ ໄປລົງທະບຽນການເກີດຂອງລູກ.

ຂ. ການຈຳແນກແລະການລ້ຽງດູເນື່ອງຈາກເອັດໄອວີ/ເອດສ໌.

ເດັກທີ່ໄດ້ຮັບຜົນກະທົບຈາກເອັດໄອວີ/ເອດສ໌ ຈະບໍ່ຄ່ອຍໄດ້ເຂົ້າໂຮງຮຽນ. ພວກເຂົາຈຳເປັນຕ້ອງໃຫ້ການດູແລ ຈາກສະມາຊິກຄອບຄົວ ຫຼື ເຂົາອາດຖືກກີດກັ້ນຢ່າງໜັກໜ່ວງຈາກ ໂຮງຮຽນເພາະຄວາມຢ້ານກົວ. ພວກເຮົາສາມາດຊ່ວຍເຂົາເຈົ້າດ້ວຍວິທີດັ່ງຕໍ່ໄປນີ້:

- ໃຫ້ເຮັດວຽກຮ່ວມກັບອົງການຈັດຕັ້ງໂລກເອດສ໌ທ້ອງຖິ່ນ ເພື່ອຈັດກອງປະຊຸມສຳມະນາສ້າງຈິດສຳນຶກກ່ຽວກັບບັນຫາເອັດໄອວີ/ເອດສ໌ໃນໂຮງຮຽນ ແລະ ຊຸມຊົນ ເພື່ອຍົກລະດັບຄວາມຮັບຮູ້ ແລະ ເພີ້ມທະວີຄວາມຮູ້ຄວາມເຂົ້າໃຈ.

- ສົນທະນາເຖິງຄວາມຈຳເປັນ ແລະ ສະພາບບັນຫາຂອງພໍ່ແມ່ຜູ້ປົກຄອງ ເຊິ່ງມີລູກບໍ່ໄດ້ຕິດເຊື້ອເອັດໄອວີ (ພວກເຂົາກໍມີສິດເໝືອນກັນ) ແລະ ເດັກເຫຼົ່ານີ້ຈະໃຫ້ເຂົາຢູ່ຢ່າງໃດ ເພື່ອໃຫ້ເຂົ້າກັນ ໄດ້ເມື່ອມີເດັກທີ່ຕິດເຊື້ອມາເຂົ້າໂຮງຮຽນ.

- ພັດທະນາ ແລະ ສະໜັບສະໜູນນະໂຍບາຍສຸຂະພາບໃນໂຮງຮຽນ ທີ່ຍິນດີຕ້ອນຮັບເດັກທີ່ຕິດ ເຊື້ອເອັດໄອວີເຂົ້າມາຮຽນ, ໃຫ້ຄວາມສະດວກແກ່ຄວາມຕ້ອງການຂອງເຂົາ ແລະ ປ້ອງກັນ ເຂົາຈາກການຖືກຈຳແນກ ແລະ ການໃຊ້ຄວາມຮຸນແຮງ.

ຄ. ການຢ້ານກົວຄວາມຮຸນແຮງ.

ເດັກອາດບໍ່ຢາກມາໂຮງຮຽນ ຖ້າພວກເຂົາຢ້ານກົວຕໍ່ການໃຊ້ຄວາມຮຸນແຮງ. ຈະມີການປະຕິບັດການອັນໃດແດ່ ທີ່ເຮົາສາມາດເຮັດໄດ້ ເພື່ອໃຫ້ເຂົ້າໃຈສະພາບຂອງໂຮງຮຽນດີຂຶ້ນ?

- ເຮັດວຽກຮ່ວມກັບເດັກ ແລະ ສະມາຊິກຊຸມຊົນເພື່ອສ້າງແຜນທີ່ບ່ອນທີ່ມີຄວາມຮຸນແຮງເກີດຂຶ້ນເຊັ່ນ: ໃນບໍລິເວນໂຮງຮຽນລວມທັງຕາມເສັ້ນທາງໄປມາໂຮງຮຽນ (ເລື່ອງນີ້ຈະອະທິບາຍລະອຽດຕື່ມ ໃນເອກກະສານເຫຼັ້ມ 3 ກ່ຽວກັບສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນ ເພື່ອນມິດໃນການຮຽນຮູ້ ທີ່ຖືກສຸຂະລັກສະນະ ແລະ ປົກປ້ອງຄວາມປອດໄພ).

- ເຮັດວຽກຮ່ວມກັບຜູ້ນຳຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງເພື່ອສ້າງຕັ້ງກົດຈະກຳ "ເຝົ້າລະວັງເດັກ" ເຊິ່ງຄູຜູ້ຮັບຜິດຊອບ, ຜູ້ປົກຄອງ ຫຼື ສະມາຊິກຊຸມຊົນເຝົ້າລະວັງສະຖານທີ່ໆມີໂອກາດຈະເກີດ ຄວາມຮຸນແຮງສູງ ທັງພາຍໃນ ແລະ ນອກໂຮງຮຽນ. ສິ່ງດັ່ງກ່າວນີ້ອາດຈະມີການຍ້າຍເດັກໄປ ຢູ່ໃນສະຖານທີ່ໆມີຄວາມປອດໄພໃນເມື່ອຈຳເປັນ.

ງ. ຄວາມເຈັບປ່ວຍແລະຄວາມອຶດຫິວ.

ເດັກທີ່ອຶດຫິວ ຫຼືເຈັບປ່ວຍບໍ່ສາມາດຮຽນໄດ້ດີ. ພວກເຮົາຄວນຈະມີຄວາມສາມາດ ເຮັດຫຍັງແດ່ ເພື່ອຈະຊ່ວຍເດັກເຫຼົ່ານີ້(**ໝາຍເຫດ:** ການປະຕິບັດການເພີ້ມເຕີມຈະໄດ້ອະທິບາຍໃນເອ ກະສານເຫຼັ້ມ 3)

- ຈັດຕັ້ງໂຄງການອາຫານໂຮງຮຽນ ສຳລັບໂຄງການຮຽນຮູ້ ເພື່ອສະໜອງອາຫານທ່ຽງ ຫຼື ອາຫານຫວ່າງຢ່າງສະໝ່ຳສະເໝີ. ສິ່ງເຫຼົ່ານີ້ ອາດຈະໃຫ້ປະໂຫຍດ ໂດຍສະເພາະແກ່ເດັກຍິງ.

- ເຮັດວຽກຮ່ວມກັບໜ່ວຍງານແພດທ້ອງຖິ່ນ ເພື່ອຈັດຕັ້ງ ການກວດສຸຂະພາບ, ປາກ ແລະ ແຂ້ວ, ໂພຊະນາການ ແລະ ໂຄງການບຳບັດປົ່ນປົວ ຕ່າງໆ.

2.2. ສະພາບແວດລ້ອມຂອງຄອບຄົວ

ກ. ຄວາມທຸກຍາກ.

ໃນຂະນະທີ່ການສຶກສາ ສາມາດປະກອບສ່ວນ ເພື່ອຫຼຸດຜ່ອນຄວາມທຸກຍາກ, ຄວາມທຸກຍາກກໍກີດກັ້ນການສຶກສາຂອງເດັກຈຳນວນຫຼວງຫຼາຍຢ່າງເຫັນໄດ້ຊັດເຈນ. ຮູ້ເຖິງສາເຫດຮາກເຫງົ້າຂອງຄວາມທຸກຍາກ ແມ່ນເລື່ອງເສດຖະກິດ, ຍຸດທະສາດທີ່ມີປະສິດທິຜົນ ເພື່ອເຂົ້າເຖິງເດັກທຸກຈົນ ແລະ ນຳເຂົ້າມາເຂົ້າໂຮງຮຽນສ່ວນຫຼາຍຈະຕ້ອງ ອີງໃສ່ສິ່ງຈູງໃຈທາງເສດຖະກິດໄລຍະສັ້ນ ແລະ ໄລຍະຍາວ ສຳລັບເດັກ ແລະ ຄອບຄົວຂອງເຂົາ.

ຕົວຢ່າງ:

ໃນປະເທດໄທ ໂຮງຮຽນເພື່ອນເດັກພວມນຳໃຊ້ຂໍ້ມູນກ່ຽວກັບຜົນສຳເລັດໃນການຮຽນຮູ້ ຂອງເດັກແລະພື້ນຖານຂອງຄອບຄົວເພື່ອລະບຸເດັກທີ່ຮຽນອ່ອນແລະມີແນວໂນ້ມທີ່ຈະປະລະເຊິ່ງ ມັກຈະເກີດຈາກຄອບຄົວຂອງເດັກທີ່ມີເງິນໜ້ອຍແລະຕົ້ລາຄາແຮງງານຂອງລູກຫຼານສູງກວ່າການ ສຶກສາຂອງເຂົາ.ເດັກເຫຼົ່ານີ້ໄດ້ຮັບບູລິມະສິດສຳລັບການເຝິກອົບຮົມທັກສະ ເພື່ອລ້ຽງຊີບໃນຂົງ ເຂດເຊັ່ນ: ການຕຳໜູກ, ຫຍິບແສ່ວ, ວຽກຊ່າງໄມ້, ການຜະລິດດ້ານກະສິກຳ, ພິມດີດ, ເຝິກອົບຮົມຄອມພິວເຕີເປັນຕົ້ນ. ການເຝິກອົບຮົມນີ້ຈະສ້າງລາຍຮັບເພີ້ມໃຫ້ແກ່ຄອບຄົວ ໃນ ຂະນະທີ່ເດັກຍັງເຂົ້າໂຮງຮຽນ ແລະ ມັນຍັງສະໜອງທັກສະໃຫ້ແກ່ເດັກທີ່ສາມາດ ໃຊ້ໄດ້ຈົນ ຕະຫຼອດຊີວິດ. ເດັກບາງຄົນໃນກຸ່ມເຫຼົ່ານີ້ຍັງເຄີຍໄດ້ຮັບ ລາງວັນລະດັບຊາດ ແລະ ລະດັບພາກ ພື້ນມາແລ້ວສຳລັບຜົນງານຂອງເຂົາ. ໃນບາງໂຮງຮຽນ, ສະມາຊິກຄອບຄົວຂອງເດັກເຫຼົ່ານີ້ຍັງ ໄດ້ຊ່ວຍເປັນ “ຄູ” ໃນການສອນເດັກ, ທັກສະທີ່ມີກຽດໄດ້ຖືກຖ່າຍທອດ ກັນມາດົນນານ ເຊັ່ນ: ວິທີການຍ້ອມເສັ້ນໄໝແລະຕຳເປັນລວດລາຍແບບພື້ນເມືອງດັ້ງເດີມ. ການມີ ສ່ວນຮ່ວມດັ່ງກ່າວ ໄດ້ເພີ້ມທະວີຄຸນຄ່າຂອງໂຮງຮຽນ ໃນສາຍຕາຂອງພໍ່ແມ່ຜູ້ປົກຄອງ ໂດຍຜ່ານການປັບປຸງຊີວິດ ການເປັນຢູ່ ແລະເນັ້ນໃສ່ຄຸນຄ່າຂອງການຮັກສາຮີດຄອງວັດທະນະທຳທີ່ສຳຄັນ. ມັນຍັງເພີ້ມທະ ວີການສື່ສານລະຫວ່າງຜູ້ປົກຄອງ ແລະ ເດັກກ່ຽວກັບອະນາຄົດ ແລະ ການສຶກສາຂອງເດັກສາ ມາດນຳມາສູ່ຄອບຄົວ. **ຍຸດທະສາດທີ່ຄ້າຍຄືກັນນີ້ ສາມາດທີ່ຈະເປັນພາກສ່ວນໜຶ່ງຂອງຫຼັກສູດ ໂຮງຮຽນຂອງທ່ານບໍ?**

- ຄຸນຄ່າຂອງການສຶກສາ.

ພໍ່ແມ່ຜູ້ປົກຄອງທີ່ທຸກຍາກບໍ່ສາມາດທີ່ຈະສະໜອງ ໃຫ້ລູກໄດ້ເຂົ້າຮຽນລວມທັງຄວາມ ຈຳເປັນພື້ນຖານຂອງຊີວິດ. ຍ້ອນແນວນັ້ນ, ເດັກຈຶ່ງອາດກາຍເປັນແຫຼ່ງລາຍຮັບຂອງຄອບຄົວ ຢ່າງໄວວາ ແທນທີ່ຈະໄດ້ສຶກສາຫາຄວາມຮູ້. ສິ່ງດັ່ງກ່າວເກີດຂຶ້ນຍ້ອນຄອບຄົວ ລວມທັງຕົວເດັກ ເອງ ບໍ່ຮູ້ສຶກວ່າການສຶກສາສອດຄ່ອງກັບຄວາມຕ້ອງການອັນຈຳເປັນ ໃນຊີວິດປະຈຳວັນຂອງ ເຂົາ. ຍ້ອນແນວນັ້ນ, ເຂົາຈຶ່ງບໍ່ຕົ້ລາຄາ ສູງຕໍ່ການສຶກສາ ແລະ ບໍ່ເຂົ້າໃຈວ່າ ເປັນຫຍັງເດັກຈຶ່ງ ຄວນໄປໂຮງຮຽນ. **ພວກເຮົາສາມາດເຮັດໄດ້ ເພື່ອ ຊ່ວຍເດັກດ້ວຍວິທີດັ່ງນີ້:**

- ສອດແຊກ “ການເລາະເບິ່ງຊຸມຊົນ” ເຂົ້າໃນແຜນການສອນ ເຊິ່ງເດັກຈະໄປຢ້ຽມຢາມຊຸມ ຊົນ ເພື່ອຮຽນຮູ້ວ່າບົດຮຽນຫຼາຍບົດມີຄວາມສຳຄັນ ສຳລັບກິດຈະກຳປະຈຳວັນຂອງພວກ ເຂົາ.
- ຊຸກຍູ້ພໍ່ແມ່ຜູ້ປົກຄອງ ແລະສະມາຊິກຊຸມຊົນໃຫ້ເປັນ “ຄູຊ່ວຍ” ໃນຫ້ອງຮຽນ ເພື່ອແລກ ປ່ຽນ ໃຫ້ຄວາມຮູ້ພູມປັນຍາທ້ອງຖິ່ນຂອງເຂົາ, ໃຫ້ອະທິບາຍຄວາມສຳຄັນຂອງສິ່ງເລົ່ານັ້ນຕໍ່ຊີວິດ ແລະ ສົມທະນາຄວາມສອດຄ່ອງກັນກັບສິ່ງທີ່ພວມຮຽນຮູ້ໃນຫ້ອງຮຽນ.

- **ການໃຫ້ການດູແລບໍ່ເໝາະສົມ.**

ໃນຂະນະທີ່ການດູແລເອົາໃຈໃສ່ທີ່ດີສຸດເຊິ່ງລູກຫຼານຄວນຈະໄດ້ຮັບນັ້ນແມ່ນມາຈາກ ພໍ່ແມ່, ແຕ່ບາງຄັ້ງສິ່ງດັ່ງກ່າວກໍເປັນໄປບໍ່ໄດ້ ໂດຍສະເພາະເມື່ອພໍ່ແມ່ຜູ້ປົກຄອງ ຈຳເປັນຕ້ອງຈາກເຮືອນໄປເຮັດວຽກ. ໃນກໍລະນີນີ້ເດັກອາດຈະໄດ້ຮັບການເບິ່ງແຍງດູແລຈາກຄົນອື່ນ ທີ່ມີຄວາມຮູ້ ແລະ ຊັບພະຍາກອນທີ່ຈຳກັດ ເຊິ່ງການເອົາໃຈໃສ່ໃຫ້ການດູແລເດັກອາດບໍ່ເໝາະສົມ. **ເຮົາມີການປະຕິບັດທີ່ສາມາດດຳເນີນການໄດ້ ເພື່ອຊ່ວຍເຫຼືອເດັກດ້ວຍວິທີດັ່ງຕໍ່ໄປນີ້:**

- ♦ ໃນວັນພິເສດໃດໜຶ່ງ, ໃຫ້ເຊີນຜູ້ໃຫ້ການດູແລເດັກໄປຢ້ຽມຢາມໂຮງຮຽນ. ຄວນສະແດງໃຫ້ເຂົາເຫັນວຽກງານຂອງເດັກ ແລະ ສົນທະນາແບບເປັນກັນເອງ ຫຼື ຈັດການຮຽນຮູ້ແບບມີສ່ວນຮ່ວມ ກ່ຽວກັບການປັບປຸງສຸຂະພາບເດັກ ແລະ ຄວາມເປັນຢູ່ທີ່ດີໂດຍຜ່ານການດູແລທີ່ດີ.
- ♦ ຊຸກຍູ້ໃຫ້ມີການປະຊຸມ“ຄູ-ຜູ້ດູແລເດັກ”ເປັນປະຈຳເພື່ອສົນທະນາອະພິປາຍຄວາມກ້າວໜ້າການຮຽນຮູ້ຂອງເດັກ ແລະວິທີໃຫ້ການດູແລທີ່ດີສາມາດປັບປຸງການຮຽນຂອງເດັກໄດ້ແນວໃດ?.
- ♦ ຂໍວັດຖຸປະກອນຕ່າງໆກ່ຽວກັບການດູແລເດັກຈາກອົງການຈັດຕັ້ງຂອງລັດ ແລະ ເອກະຊົນ ເພື່ອ ນຳໃຊ້ມັນເຂົ້າໃນວຽກສົ່ງເສີມສຸຂະພາບ ຫຼື ໂຄງການສຶກສາຊີວິດໃນຄອບຄົວຂອງເດັກ ແລະ ເອົາເອກະສານນັ້ນ ໃຫ້ເດັກຖືເມືອບ້ານ ເພື່ອອ່ານໃຫ້ສະມາຊິກໃນຄອບຄົວຟັງ.

ຂ. ການຈຳແນກເພດ/ບົດບາດຍິງຊາຍ.

ໃນບາງສັງຄົມ, ຖ້າຈະຕ້ອງເລືອກລະຫວ່າງເດັກຍິງ ຫຼື ເດັກຊາຍໄປເຂົ້າໂຮງຮຽນ, ເດັກຊາຍ ມັກຈະຖືກເລືອກຫຼາຍທີ່ສຸດ. ສ່ວນເດັກຍິງມີແນວໂນ້ມວ່າ ຈະຕ້ອງເປັນຜູ້ດູແລກ່ຽວກັບວຽກເຮືອນການຊານ. **ພວກເຮົາຈະສາມາດຊຸກຍູ້ໃຫ້ເດັກຍິງ ໄດ້ເຂົ້າໂຮງຮຽນໄດ້ແນວໃດ ?**

- ♦ ຕິດຕາມການເຂົ້າໄປໂຮງຮຽນ ແລະ ເກັບກຳຂໍ້ມູນເດັກຍິງຜູ້ທີ່ບໍ່ໄດ້ເຂົ້າໂຮງຮຽນ.
- ♦ ປຸກລະດົມຊຸມຊົນເພື່ອຊຸກຍູ້ໃຫ້ເດັກຍິງເຂົ້າໂຮງຮຽນ ເຊິ່ງອາດໃຫ້ເປັນສ່ວນໜຶ່ງຂອງການສ້າງ ຕັ້ງຄະນະກຳມະການການສຶກສາຂອງຊຸມຊົນ ຫຼື ເປັນກິດຈະກຳໜຶ່ງຂອງສະມາຄົມພໍ່ແມ່ນັກຮຽນ. ສະໜອງສື່ໂຄສະນາທີ່ສະແດງໃຫ້ເຫັນຄຸນຄ່າຂອງການສຶກສາ ສຳລັບເດັກຍິງແລ້ວແຈກຢາຍ ໃຫ້ແຕ່ລະຫຼັງຄາເຮືອນ.
- ♦ ພະຍາຍາມເຊື່ອມໂຍງສິ່ງທີ່ສອນ ໃນຫ້ອງຮຽນກັບຊີວິດປະຈຳວັນຂອງເດັກ ແລະ ຄອບຄົວ ເພື່ອຊຸກຍູ້ໃຫ້ພໍ່ແມ່ສົ່ງເຂົາເຈົ້າໄປເຂົ້າໂຮງຮຽນ.
- ♦ ໂຄສະນາຂົນຂວາຍພໍ່ແມ່ຜູ້ປົກຄອງໃຫ້ປົກປ້ອງ ແລະ ສະໜອງຄວາມເທົ່າທຽມກັນຂອງລູກຫຼານທຸກຄົນ.

- ♦ ໂອ້ລົມກັບພໍ່ແມ່ຜູ້ປົກຄອງເດັກ ເພື່ອໃຫ້ເຫັນວ່າຖ້າມີການຈັດສັນວຽກງານຂອງຄອບຄົວຄືນໃໝ່ ລູກຫຼານຜູ້ຍິງ ກໍສາມາດໄປເຂົ້າໂຮງຮຽນປົກກະຕິໄດ້.
- ♦ ໃຫ້ຄົ້ນຄວ້າເບິ່ງຖ້າຕາຕະລາງຮຽນ ສາມາດຢືດຢຸ່ນໄດ້ສຳລັບເດັກຍິງ ຜູ້ທີ່ມີພາລະໜ້າຍຢ່າງຮັບຜິດຊອບ. ເຮັດວຽກຮ່ວມກັບການຈັດຕັ້ງທ້ອງຖິ່ນ ເພື່ອຈັດຕັ້ງກິດຈະກຳຊຸມຊົນທີ່ຈະໃຫ້ເວລາທີ່ຈຳເປັນແກ່ເດັກຍິງ ເພື່ອໄດ້ໄປໂຮງຮຽນ ເຊັ່ນ ໂຄງການດູແລເດັກ.
- ♦ ກຳນົດ ແລະ ໃຫ້ການສະໜັບສະໜູນການແກ້ບັນຫາຂອງທ້ອງຖິ່ນ ເຊັ່ນ: ການຈັດຕັ້ງໂຮງຮຽນແບບຕ່າງໆ ທີ່ມີຄຸນນະພາບ ເຊັ່ນ ການຮຽນຢູ່ກັບເຮືອນ ສຳລັບເດັກຍິງທີ່ບໍ່ສາມາດໄປໂຮງຮຽນສາມັນໄດ້.
- ♦ ຊຸກຍູ້ການສ້າງຕັ້ງໂຄງການຕ່າງໆ ສຳລັບກະຕຸ້ນເດັກຍິງ ເຊັ່ນ ໃຫ້ທຶນການສຶກສາ, ເງິນອຸດໜູນ, ໂຄງການອາຫານເສີມ, ການບໍລິຈາກອຸປະກອນການຮຽນ ຫຼື ເຄື່ອງແບບນັກຮຽນ.

- **ຄວາມແຕກຕ່າງດ້ານວັດທະນະທຳ ແລະ ປະເພນີທ້ອງຖິ່ນ.**

ໂຮງຮຽນຮຽນຮ່ວມຈະອ້າແຂນຮັບຄວາມຫຼາກຫຼາຍ ແລະ ທະນຸຖະໜອມຄວາມແຕກຕ່າງຂອງເດັກ. ສຳລັບເດັກທີ່ເວົ້າພາສາຊົນເຜົ່າ ຫຼື ມາຈາກວັດທະນະທຳທີ່ແຕກຕ່າງ, ພວກເຮົາຈຳ ເປັນຕ້ອງເນັ້ນໃສ່ສິ່ງດັ່ງຕໍ່ໄປນີ້:

- ♦ ເຮັດວຽກຮ່ວມກັບພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ ເພື່ອປັບປ່ຽນບົດຮຽນທີ່ສອນໃນຫ້ອງຮຽນ ແລະ ສື່ການສອນເພື່ອນຳສະເໜີຄວາມແຕກຕ່າງດ້ານວັດທະນະທຳ ແລະ ພາສາຂອງທ້ອງຖິ່ນ. ສິ່ງດັ່ງກ່າວຈະຊ່ວຍຮັບປະກັນ ໃຫ້ຊຸມຊົນຊອກຫາສື່ການສອນທີ່ເປັນຂອງຈິງ ແລະ ເປັນປະໂຫຍດ ແລະ ມັນຍັງຈະຊຸກຍູ້ພວກເຂົາ ໃຫ້ສົ່ງລູກຫຼານໄປໂຮງຮຽນ. ວິທີປະຕິບັດ ເລື່ອງນີ້ ໄດ້ນຳສະເໜີໃນເອກະສານເຫຼັ້ມທີ 2 ຂອງຊຸດເຄື່ອງມືນີ້.
- ♦ ນຳໃຊ້ນິທານ/ບົດເລົ່າເລື່ອງ, ເລື່ອງເລົ່າຂານກັນມາ, ຕຳນານ, ເພງ ແລະ ບົດກອນທ້ອງຖິ່ນໃນການພັດທະນາບົດຮຽນ.
- ♦ ສຳລັບເດັກທີ່ບໍ່ຮູ້ພາສາທີ່ສອນໃນຫ້ອງຮຽນຂອງທ່ານ, ໃຫ້ຮ່ວມເຮັດວຽກກັບຄູທີ່ຮູ້ສອງພາສາ ຫຼື ຜູ້ໃດໜຶ່ງທີ່ສາມາດຮູ້ພາສາຂອງເດັກ (ລວມທັງ ສະມາຊິກຄອບຄົວ ແລະ ຊຸມຊົນ) ເພື່ອພັດທະນາຫຼັກສູດເຝິກອົບຮົມພາສາທີ່ເໝາະສົມສຳລັບຫ້ອງຮຽນ.

2.3. ສະພາບແວດລ້ອມຂອງໂຮງຮຽນ.

ກ. ຄ່າໃຊ້ຈ່າຍຕ່າງໆ.

ສຳລັບຫຼາຍໆຄອບຄົວທີ່ທຸກຍາກ, ຄ່າໃຊ້ຈ່າຍໂດຍກົງ ແລະ ໂດຍທາງອ້ອມຂອງການສົ່ງລູກຫຼານໄປໂຮງຮຽນ ອາດຈະເປັນຄ່າໃຊ້ຈ່າຍທີ່ເກີນຄວາມສາມາດ. **ມີສິ່ງໃດແດ່ທີ່ພວກເຮົາຈະສາມາດເຮັດໄດ້ເພື່ອຊ່ວຍເຫຼືອເດັກເຫຼົ່ານີ້?**

- ໃຫ້ສົນທະນາກັບຜູ້ບໍລິຫານໂຮງຮຽນ, ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ ກ່ຽວກັບ ວ່າແມ່ນຄ່າໃຊ້ຈ່າຍໂດຍກົງ ແລະ ໂດຍທາງອ້ອມອັນໃດ ທີ່ອາດພາໃຫ້ເດັກບໍ່ໄດ້ເຂົ້າ ໂຮງຮຽນ.
- ກຳນົດວິທີການເພື່ອຫຼຸດຜ່ອນ (ຫຼື ຍົກເວັ້ນ) ຄ່າໃຊ້ຈ່າຍເຫຼົ່ານີ້; ຕົວຢ່າງ: ໂດຍນຳໃຊ້ ໂຄງການ ກະຕຸກຊຸກຍູ້ ເຊັ່ນ ທຶນການສຶກສາ, ທຶນອຸດໜູນ, ອາຫານ, ອຸປະກອນການຮຽນ ແລະ ເຄື່ອງແບບນັກຮຽນ ເຊິ່ງອາດເປັນໄປໄດ້ທີ່ຈະປະສານງານໄປຍັງອົງກອນການກຸສົນ ທ້ອງຖິ່ນ.

ຂ. ທີ່ຕັ້ງຂອງໂຮງຮຽນ.

ໂດຍສະເພາະແລ້ວແມ່ນຢູ່ເຂດຊົນນະບົດ ຖ້າໂຮງຮຽນຫາກຕັ້ງຢູ່ຫ່າງຈາກຊຸມຊົນ, ຄອບຄົວ ອາດຈະບໍ່ຢາກສົ່ງລູກຫຼານຂອງຕົນໄປໂຮງຮຽນ. ສະນັ້ນ, **ມີປະຕິບັດການອັນໃດ ແດ່ທີ່ອາດສາມາດ ເລີ້ມຕົ້ນໄດ້ ເພື່ອທີ່ຈະຊ່ວຍເຫຼືອເດັກເຫຼົ່ານີ້?**

- ຊອກເບິ່ງວ່າແມ່ນເດັກຜູ້ໃດແດ່ ທີ່ອາໄສຢູ່ໄກຈາກໂຮງຮຽນທີ່ສຸດ ໂດຍສັງເກດຈາກ ການສ້າງ ແຜນທີ່ໂຮງຮຽນ-ຊຸມຊົນ ແລະ ການເກັບກຳຊີວະປະຫວັດເດັກ.
- ເຮັດວຽກຮ່ວມກັບພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ ເພື່ອກຳນົດວິທີການຕ່າງໆ ເພື່ອ ນຳເດັກເຫຼົ່ານີ້ມາເຂົ້າໂຮງຮຽນ ແລະ ກັບເຮືອນດ້ວຍຄວາມປອດໄພ.

ຄ. ການຈັດຕາຕະລາງຮຽນ

ເດັກບາງຄົນອາດຕ້ອງການຢາກຈະຮຽນ ແຕ່ວ່າຕາຕະລາງສອນ ແລະ ເວລາຮຽນຊ້ຳພັດ ຂັດກັບເວລາເຮັດວຽກຂອງເຂົາ. ເດັກເຫຼົ່ານີ້ບໍ່ສາມາດມາເຂົ້າຮຽນຕາມຊົ່ວໂມງຮຽນປົກກະຕິ ຂອງໂຮງຮຽນໄດ້. ຍິ່ງໄປກວ່ານັ້ນເດັກຍິງ ກໍຄື ເດັກຊາຍອາດຈຳເປັນຕ້ອງອອກໂຮງຮຽນ ໃນ ເມື່ອຕາຕະລາງຮຽນຂອງໂຮງຮຽນ ໄດ້ຂັດກັບພາລະໜ້າທີ່ຂອງເດັກ ທີ່ຕ້ອງໄດ້ເຮັດຢູ່ທາງ ຄອບຄົວ.

ພວກເຮົາສາມາດຊ່ວຍເຫຼືອເດັກດ້ວຍວິທີ ດັ່ງຕໍ່ນີ້:

- ໃຫ້ຄົ້ນຄວ້າເບິ່ງຖ້າພໍຈັດຕາຕະລາງຮຽນແບບຢືດຢຸ່ນໄດ້ສຳລັບເດັກທີ່ຈຳເປັນຕ້ອງເຮັດ ວຽກ.
- ປຶກສາຫາລືກັບໜ່ວຍງານສັງຄົມໃນທ້ອງຖິ່ນ ຫຼື ອົງກອນການກຸສົນ ເພື່ອຄົ້ນຄວ້າເບິ່ງ ຖ້າໂຄງການການຮຽນຮູ້ປະກົດມີຢູ່ແລ້ວ ສຳລັບເດັກທີ່ຈຳເປັນຕ້ອງເຮັດວຽກ ຫຼື ອາໄສ ຢູ່ຕາມຖະໜົນ, ຫຼື ເບິ່ງວ່າຖ້າໂຄງການນີ້ສາມາດທີ່ຈະສ້າງຂຶ້ນໄດ້. ຕົວຢ່າງ: ໂຄງການ

ຫຼັງເລີກຮຽນ ຫຼື ທ້າຍອາທິດ ໃນບ່ອນທີ່ເດັກໃນໂຮງຮຽນ “ສອນ” ເພື່ອນຂອງເຂົາທີ່ບໍ່ໄດ້ເຂົ້າໂຮງຮຽນ ໃນສູນເດັກ ຫຼື ສູນຊາວໜຸ່ມໃນທ້ອງຖິ່ນ.

ງ. ອາຄານສະຖານທີ່.

ຖ້າໂຮງຮຽນຂອງທ່ານບໍ່ມີອາຄານສະຖານທີ່ທີ່ເໝາະສົມ, ອັນນີ້ກໍແມ່ນໜຶ່ງ ໃນເຫດຜົນທີ່ເຮັດໃຫ້ເດັກບໍ່ໄປໂຮງຮຽນ. ດັ່ງນັ້ນ ພວກເຮົາຈຳເປັນຕ້ອງເຂົ້າໃຈວ່າ ສະພາບແວດລ້ອມທາງກາຍະພາບ ແລະ ສັງຄົມຂອງໂຮງຮຽນເຮົາສາມາດປ່ຽນແປງໄດ້ ເພື່ອຈະຮັບເດັກທຸກຄົນເຂົ້າໂຮງຮຽນ. ຕົວຢ່າງ: ຖ້າເດັກພິການບໍ່ສາມາດເຂົ້າຫ້ອງຮຽນຢູ່ຊັ້ນທີສອງຂອງອາຄານຮຽນໄດ້, ໜຶ່ງໃນການແກ້ໄຂງ່າຍໆ ກໍຄື ປ່ຽນຫ້ອງຮຽນນັ້ນມາຢູ່ຊັ້ນທີ່ໜຶ່ງ. **ມີການປະຕິບັດອັນໃດແດ່ທີ່ ອາດສາມາດເຮັດໄດ້ ເພື່ອຈະຊ່ວຍເຫຼືອເດັກເຫຼົ່ານີ້?**

- ເຮັດວຽກຮ່ວມກັບຄອບຄົວ ແລະ ຜູ້ນຳຊຸມຊົນ ເພື່ອຈັດຫາລະບົບນ້ຳທີ່ປອດໄພ ແລະ ກໍ່ສ້າງ ວິດຖ່າຍທີ່ແຍກສຳລັບເດັກຊາຍ-ເດັກຍິງ ແລະ ສະໜອງນ້ຳສະອາດ (ເບິ່ງເອກະສານເຫຼັ້ມ 3).
- ກຳນົດຄວາມຕ້ອງການທາງດ້ານຮ່າງກາຍ ແລະ ຄວາມຮູ້ສຶກທີ່ຈຳເປັນຂອງເດັກທີ່ມາຈາກພື້ນຖານແຕກຕ່າງກັນ ແລະ ມີຄວາມສາມາດຕ່າງກັນ. ກຳນົດວິທີທີ່ໂຮງຮຽນຈະສາມາດ ໃຫ້ຄວາມສະດວກ ເພື່ອຮັບຮອງຄວາມຕ້ອງການໃນການຮຽນຮູ້ຂອງເຂົາ.

ຈ. ການກຽມຄວາມພ້ອມ.

ມັກມີຫຼາຍຄັ້ງທີ່ໂຮງຮຽນລັງເລ ທີ່ຈະຮັບຢ່າງເຕັມໃຈ ສຳລັບ ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ເຂົ້າຮຽນໃນຫ້ອງຮຽນດຽວກັນ ຍ້ອນວ່າຄູບໍ່ຮູ້ວິທີສິດສອນເດັກກຸ່ມນີ້. **ມີບາງສິ່ງບາງຢ່າງ ທີ່ພວກເຮົາຈະສາມາດເຮັດໄດ້ເພື່ອຊ່ວຍເຫຼືອຄູ ແລະ ເດັກເຫຼົ່ານີ້:**

- ຊອກເບິ່ງວ່າ ແມ່ນເດັກຄົນໃດທີ່ບໍ່ມາເຂົ້າໂຮງຮຽນຂອງທ່ານ ແລະ ເປັນຫຍັງຈຶ່ງບໍ່ມາ? ເຂົາມີພື້ນຖານ ແລະ ຄວາມສາມາດແບບໃດແດ່? ຄວາມຕ້ອງການພິເສດ ໃນການຮຽນຮູ້ ມີຫຍັງແດ່?
- ພົວພັນກັບອົງກອນສຶກສາ, ອົງການຈັດຕັ້ງເອກະຊົນ, ສະຖາບັນສ້າງຄູ, ມູນນິທິການກຸສົນ ທ້ອງຖິ່ນຕະຫຼອດຮອດອົງການຈັດຕັ້ງສາກົນ ທີ່ເຮັດວຽກງານປັບປຸງການສຶກສາຂອງເດັກ.
- ພົວພັນກັບຄູແລະສອບຖາມເຂົາເຈົ້າ ຖ້າຕົວທ່ານ ແລະ ເພື່ອນຂອງ ທ່ານ ຫາກສາມາດ ໄປຢ້ຽມຢາມໂຮງຮຽນຂອງເຂົາເຈົ້າ ເພື່ອຮຽນຮູ້ວິທີສິດສອນເດັກທີ່ມີຄວາມຕ້ອງການພິເສດ. ແຕ່ຖ້າຫາກທ່ານບໍ່ສາມາດ ໄປຢ້ຽມຢາມໂຮງຮຽນເຫຼົ່ານີ້ໄດ້ ຍ້ອນສາເຫດທີ່ວ່າ ຕ້ອງໄດ້ໃຊ້ຈ່າຍເງິນຫຼາຍນັ້ນ ທ່ານກໍອາດສອບຖາມເບິ່ງວ່າ ຖ້າຫາກພວກເຂົາສາມາດທີ່ຈະສົ່ງຊັບພະຍາກອນໃດໜຶ່ງມາໃຫ້ໃຊ້ໃນຫ້ອງຮຽນ ເຊັ່ນວ່າ:ແຜນການສອນແບບງ່າຍໆ,

ບົດກ່ຽວກັບວິທີສິດສອນ ຫຼື ຕົວຢ່າງສື່ການສອນທີ່ທ່ານສາມາດຜະລິດເອງໄດ້ຢ່າງງ່າຍດາຍ.

- ຖ້າມີຊັບພະຍາກອນຢູ່ແລ້ວ ກໍຂໍໃຫ້ພວກເຂົາມາຢ້ຽມຢາມໂຮງຮຽນຂອງທ່ານ ເພື່ອໃຫ້ຄຳແນະນຳລວມທັງສົນທະນາກັບຜູ້ບໍລິຫານໂຮງຮຽນ ແລະ ຄູກ່ຽວກັບແຜນຂອງການສອນເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ.
- ທັງໝົດຂ້າງເທິງ, ທ່ານຈົ່ງຢ່າທໍ້ຖອຍໃຈ. ໃຫ້ສ້າງເຄືອຂ່າຍ ແລະ ການພົວພັນທີ່ດີກັບຜູ້ທີ່ຮູ້ວິທີສິດສອນເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ແລະ ໃຫ້ໝັ່ນພົວພັນກັບເຂົາເຈົ້າ.

ສ. ຄູສາມາດເຮັດຫຍັງແດ່ເພື່ອເພີ້ມທະວີການເຂົ້າເຖິງໂຮງຮຽນ ແລະ ຂີດຄວາມສາມາດໃນການຮຽນຮູ້ຂອງເດັກພິການ.

1. ບາງຄັ້ງເດັກພິການກໍພົບຄວາມຫຍຸ້ງຍາກ ທີ່ຈະໄປເຖິງໂຮງຮຽນ. ໃຫ້ພະຍາຍາມຈັດຕັ້ງການຂົນສົ່ງ ແລະ ເຮັດໃຫ້ໂຮງຮຽນເຂົ້າເຖິງງ່າຍ ໂດຍສ້າງທາງລາດ ແລະ ສິ່ງອື່ນໆ ເພື່ອຕອບສະໜອງຄວາມຕ້ອງການສະເພາະ.
2. ເມື່ອເດັກພິການມາເຂົ້າໂຮງຮຽນມື້ທຳອິດ, ໃຫ້ໂອ້ລົມກັບຄົນໃນຄອບຄົວທີ່ມາກັບເດັກ. ຊອກ ເບິ່ງວ່າ ເດັກມີຄວາມເປັນພິການດ້ານໃດ ແລະ ລາວສາມາດເຮັດຫຍັງໄດ້ແດ່. ໃຫ້ຖາມເບິ່ງ ກ່ຽວກັບ ບັນຫາ ແລະ ຄວາມຫຍຸ້ງຍາກທີ່ເດັກມີ.
3. ເມື່ອເດັກເລີ້ມເຂົ້າຮຽນ, ໃຫ້ໄປຢ້ຽມຢາມພໍ່ແມ່ຂອງເຂົາເຈົ້າເປັນບາງຄັ້ງຄາວ ເພື່ອສົນທະນາກັບຄອບຄົວຂອງເດັກວ່າ ໄດ້ເຮັດຫຍັງແດ່ ເພື່ອສ້າງຄວາມສະດວກໃນການຮຽນຮູ້ຂອງເດັກ. ຖາມກ່ຽວກັບແຜນສຳລັບອະນາຄົດຂອງເດັກ. ຊອກຫາວິທີທີ່ດີສຸດ ເພື່ອທ່ານຈະໄດ້ເຮັດວຽກ ຮ່ວມກັບຄອບຄົວຂອງເດັກ.
4. ສອບຖາມເບິ່ງວ່າເດັກຈຳເປັນຕ້ອງກິນຢາຊະນິດໃດໜຶ່ງບໍ່ ເວລາໄປໂຮງຮຽນ.
5. ຖ້າທ່ານບໍ່ມີເວລາພຽງພໍເພື່ອເອົາໃຈໃສ່ເດັກ ກໍໃຫ້ຂໍຜູ້ຊ່ວຍນຳໂຮງຮຽນ ຫຼື ຊຸມຊົນ. ຜູ້ຊ່ວຍອາດສາມາດ ໃຫ້ການຊ່ວຍເຫຼືອເພີ້ມເຕີມທີ່ຈຳເປັນໃນຊ່ວງເວລາເຂົ້າໂຮງຮຽນ.
6. ຕ້ອງໃຫ້ແນ່ໃຈວ່າເດັກສາມາດມອງເຫັນ ແລະ ໄດ້ຍິນເມື່ອທ່ານສອນ. ໃຫ້ຂຽນແຈ້ງໆ ເພື່ອໃຫ້ພວກເຂົາສາມາດອ່ານສິ່ງທີ່ທ່ານພວມເວົ້າ. ນອກນີ້ ກໍຄວນໃຫ້ເດັກພິການໄດ້ນັ່ງໂຕະໜ້າ ເພື່ອໃຫ້ເດັກສາມາດມອງເຫັນ ແລະ ໄດ້ຍິນດີຂຶ້ນ.
7. ຊອກຮູ້ວ່າເດັກ ແລະ ຜູ້ປົກຄອງມີບັນຫາກ່ຽວກັບການເຂົ້າໂຮງຮຽນບໍ. ສອບຖາມເບິ່ງວ່າ ຖ້າຄອບຄົວຄິດວ່າເດັກຜູ້ອື່ນໆ ສາມາດໃຫ້ການຊ່ວຍເຫຼືອເດັກ ແລະ ຖາມເບິ່ງວ່າເດັກຮຽນໄດ້ດີ ຫຼືບໍ່ ໃນໂຮງຮຽນ.

UNICEF,http://www.unicef.org/teachers/access.htm

ຄຳຖາມ :

1. ພວກເຮົາຄວນມີການວາງແຜນແນວໃດ ເພື່ອນຳເອົາເດັກທຸກຄົນເຂົ້າໂຮງຮຽນ?
2. ການປະຕິບັດການເພື່ອນຳເອົາເດັກເຂົ້າຮຽນຄວນເຮັດແນວໃດ ?
3. ຄູສາມາດເຮັດຫຍັງແດ່ເພື່ອນຳເອົາເດັກທຸກຄົນເຂົ້າຮຽນ ?

ຄູ່ມືເຫຼັ້ມທີ 2

ການຈັດການສອນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້



ກະຊວງສຶກສາທິການ
ສູນການສຶກສາຮຽນຮ່ວມ
ສະໜັບສະໜູນໂດຍ ອົງການອຸຍແນດສະໂກ
ນະຄອນຫຼວງວຽງຈັນ, ສປປ ລາວ
2011

ຄຳນຳ

ຊຸດຄູ່ມືແນະນຳການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດ ຕໍ່ການຮຽນຮູ້ ໄດ້ສ້າງຂຶ້ນໂດຍອົງການອຸຍແນສໂກປະຈຳພາກພື້ນອາຊີ-ປາຊີຟິກ ພ້ອມທັງພິມ ແຈກຢາຍຢ່າງ ກ້ວາງຂວາງໃນທົ່ວພາກພື້ນ. ຄູ່ມືດັ່ງກ່າວມີທັງໝົດ 4 ເຫຼັ້ມຄື: ຄູ່ມືແນະນຳການ ສ້າງສະພາບແວດລ້ອມ, ຄູ່ມືແນະນຳການຈັດການສອນຫ້ອງຮຽນຮ່ວມ, ຄູ່ມືແນະນຳການສົ່ງເສີມ ສຸຂະພາບ, ຄູ່ມືແນະນຳການປະ ຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນໃນຫ້ອງຮຽນຮ່ວມທີ່ ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດ ໃນການຮຽນຮູ້.

ສຳລັບຄູ່ມືແນະນຳເຫຼັ້ມນີ້ເປັນຄູ່ມືແນະນຳເຫຼັ້ມທີ 2: ເນື້ອໃນເວົ້າເຖິງ ການຈັດການ ສອນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຈຸດປະສົງຫຼັກຂອງຄູ່ມືແນະນຳເຫຼັ້ມນີ້ ແມ່ນເພື່ອການ ສ້າງຫ້ອງຮຽນຮ່ວມ, ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ການວາງແຜນການສອນ ຫ້ອງຮຽນຮ່ວມ, ການນຳໃຊ້ຊັບພະຍາກອນທີ່ມີໃຫ້ເກີດຜົນປະໂຫຍດສູງ. ເພື່ອເສີມສ້າງຄວາມສາ ມາດໃຫ້ແກ່ຜູ້ຊົມໃຊ້ ກ່ຽວກັບວິທີການຈັດການຮຽນເປັນກຸ່ມ, ການສ້າງຕັ້ງລະບຽບການພື້ນຖານ ໃນການເຮັດວຽກເປັນກຸ່ມ, ການຄວບ ຄຸມຫ້ອງຮຽນຮ່ວມ ແລະ ເຕັກນິກການປະເມີນແບບຕັ້ງໜ້າ ແລະ ແບບຕົວຈິງຕາມຫຼັກວິຊາການ ເພື່ອສ້າງໂຮງຮຽນ ແລະ ຫ້ອງຮຽນໃຫ້ກາຍເປັນການສຶກສາ ຮຽນຮ່ວມ ແລະ ເປັນມິດຫຼາຍຂຶ້ນ, ຊຶ່ງເປັນປະໂຫຍດສູງ ສຳລັບຜູ້ສ້າງນະໂຍບາຍ, ຜູ້ຈັດຕັ້ງປະຕິ ບັດ ແລະ ຊຸມຊົນ.

ເພື່ອສຳເລັດເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫະສະວັດ ເພື່ອການ ພັດທະນາໃນປີ 2015. ອົງການອຸຍແນສໂກໄດ້ແນະນຳໃຫ້ແຕ່ລະປະເທດສະມາຊິກ ດຳເນີນການ ແປເປັນ ພາສາຂອງຕົນເອງ ແລະ ດັດປັບໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະປະເທດ. ສຳລັບ ສປປ ລາວ, ອະດີດກົມສາມັນສຶກສາໄດ້ຮັບການສະໜັບສະໜູນ ໃນການແປຈາກສະບັບ ຕົ້ນທີ່ເປັນພາສາອັງກິດມາເປັນສະບັບພາສາລາວ. ຈາກນັ້ນ, ໃນປີ 2010 ໂດຍການສືບຕໍ່ສະໜັບ ສະໜູນຈາກອົງການ UNESCO, ສູນການສຶກສາຮຽນຮ່ວມໄດ້ຮ່ວມກັບກົມສ້າງຄູ, ກົມປະຖົມ ແລະ ອະນຸບານ ແລະ ສະຖາບັນສ້າງຄູ 8 ແຫ່ງ ຈັດກອງປະຊຸມວິຊາການຮຽບຮຽງ, ປັບປຸງ ແລະ ຮິບໂຮມອີກຄັ້ງໜຶ່ງ. ການປັບປຸງ ແລະ ຮິບໂຮມຄັ້ງນີ້ບໍ່ໄດ້ປ່ຽນແປງເນື້ອໃນແຕ່ປະການໃດ ພຽງ ແຕ່ນຳໃຊ້ຄຳສັບ ແລະ ສຳນວນເປັນ ພາສາລາວ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ຕົວຢ່າງຈຳນວນ ໜຶ່ງຖືກຄັດອອກ ເພື່ອໃຫ້ມີລັກສະນະກະທັດລັດແກ່ຜູ້ຊົມໃຊ້.

ສູນການສຶກສາຮຽນຮ່ວມສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງທີມງານວິຊາການ ຈາກກະຊວງສຶກສາທິການ ແລະ ສະຖາບັນສ້າງຄູທັງ 8 ແຫ່ງ ທີ່ໄດ້ໃຫ້ການຮ່ວມມື ໃນການຮຽບ ຮຽງຄູ່ມືດັ່ງກ່າວ. ພິເສດຂໍຂອບໃຈມາຍັງ ອົງການອຸຍແນສໂກ ທີ່ໃຫ້ການສະໜັບສະໜູນດ້ານງົບ ປະມານນັບທັງການຮຽບຮຽງ ແລະ ຄ່າພິມແຈກຢາຍອີກດ້ວຍ. ເປັນທີ່ແນ່ນອນວ່າການປັບປຸງ,

ຮ່ຽບໂຮມຄັ້ງນີ້ຈະບໍ່ປາສະຈາກໄດ້ຂໍ້ຂາດຕົກບົກຜ່ອງ. ສູນການສຶກສາຮຽນຮ່ວມມີຄວາມຍິນດີຮັບ
ເອົາຄຳຕຳນິຕິຊົມທຸກປະການຈາກຜູ້ອ່ານ ແລະ ຜູ້ຊົມໃຊ້ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນໃນອະນາຄົດ.

ຜູ້ອຳນວຍການສູນການສຶກສາຮຽນຮ່ວມ

ສາລະບານ

ໜ້າ

ພາກທີ I ການສ້າງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ບົດທີ 1 : ການຮຽນຮູ້ ກ່ຽວກັບການຮຽນ ແລະ ຜູ້ຮຽນ.....01

1.1 ການຮຽນ ແລະ ການສອນ.....01

1.2 ການຮຽນຮູ້ຂອງເດັກ..... 02

1.3 ການສ້າງສະພາບແວດລ້ອມການຮຽນຮູ້ທີ່ມີການຄຸ້ມຄອງທີ່ດີຢູ່ໃນຫ້ອງຮຽນທີ່ມີນັກຮຽນຫລາຍຄົນ.....10

ບົດທີ 2: ການເຮັດໃຫ້ການຮຽນຮູ້ມີຄວາມໝາຍສຳຄັນສຳລັບທຸກຄົນ.....12

2.1 ການຮຽນຮູ້ເພື່ອຊີວິດ.....12

2.2 ການສ້າງສະພາບແວດລ້ອມການຮຽນຮູ້ທີ່ເປັນເພື່ອນມິດເພື່ອເຮັດໃຫ້ການຮຽນຮູ້ມີຄວາມໝາຍ.....13

2.3 ການສ້າງປະສົບການການຮຽນຮູ້ທີ່ຄຳນຶງເຖິງບົດບາດຍິງ-ຊາຍ.....15

2.4 ການຮຽນຮູ້ແບບຕັ້ງໜ້າ ແລະ ແບບມີສ່ວນຮ່ວມ..... 18

2.5 ການເຮັດໃຫ້ວິຊາຄະນິດສາດ,ວິທະຍາສາດ ແລະ ພາສາມີຄວາມໝາຍສຳຄັນສຳລັບທຸກຄົນ.....21

ພາກທີ II ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ການຮຽນຮູ້ເປັນເພື່ອນມິດ.....35

ບົດທີ 3: ການວາງແຜນສຳລັບການສອນ ແລະ ການຮຽນຮູ້.....35

3.1 ກິດຈະວັດປະຈຳວັນ.....35

3.2 ຄວາມຮັບຜິດຊອບຂອງເດັກ 36

3.3 ການວາງແຜນການສອນ.....37

3.4 ການສິດສອນຢ່າງມີປະສິດຜົນຢູ່ໃນຫ້ອງຮຽນທີ່ມີຈຳນວນນັກຮຽນຫລາຍ.....42

ບົດທີ 4: ການນຳໃຊ້ຊັບພະຍາກອນທີ່ມີໃຫ້ເກີດປະໂຫຍດສູງສຸດ.....54

4.1 ພື້ນທີ່ເປົ່າຫວ່າງກາຍະພາບ.....55

4.2 ມຸມຮຽນຮູ້.....55

4.3 ພື້ນທີ່ວາງສະແດງ.....57

4.4 ມູມອ່ານໜັງສື.....58

4.5 ການຈັດຕັ້ງສະພາບແວດລ້ອມທາງດ້ານກາຍະພາບຂອງຫ້ອງຮຽນ.....60

4.6 ການຈັດຕັ້ງສະພາບແວດລ້ອມທາງດ້ານ ຈິດຕະສາດ- ສັງຄົມຂອງຫ້ອງຮຽນ.....63

ບົດທີ 5: ການຈັດການຮຽນເປັນກຸ່ມ ແລະ ການຮຽນຮູ້ແບບຮ່ວມມື.....75

5.1 ວິທີຕ່າງໆສຳລັບວຸກເປັນກຸ່ມ.....75

5.2 ການໃຊ້ການຈັດກຸ່ມໃນຫ້ອງຮຽນແບບແຕກຕ່າງກັນ.....76

5.3 ການຮຽນຮູ້ແບບຮ່ວມມືກັນ.....77
5.4 ທັກສະການພົວພັນລະຫວ່າງບຸກຄົນເພື່ອການຮຽນຮູ້.....79
5.5 ການສ້າງຕັ້ງລະບຽບການພື້ນຖານໃນການເຮັດວຽກເປັນກຸ່ມ.....80
5.6 ການຈັດການຮຽນຮູ້ແບບເພື່ອນຊ່ວຍເພື່ອນ.....81
5.7 ການຮຽນຮູ້ທີ່ຄວບຄຸມດ້ວຍຕົນເອງ.....82
5.8 ການວາງແຜນການສອນສຳລັບຄວາມແຕກຕ່າງທີ່ຫລາກຫລາຍ.....83
5.9 ການຄຸ້ມຄອງຫ້ອງຮຽນທີ່ມີລັກສະນະຕັ້ງໜ້າແລະແບບຮຽນຮ່ວມ.....86
ບົດທີ 6 : ການປະເມີນຜົນແບບຕັ້ງໜ້າ ແລະ ແບບຕົວຈິງ.....90
6.1 ການປະເມີນຜົນ.....90
6.2 ຜົນໄດ້ຮັບຂອງການຮຽນຮູ້.....91
6.3 ວິທີ ແລະ ເຕັກນິກການປະເມີນຜົນແບບຕົວຈິງ.....93
6.4 ການສ່ອງແສງຄືນ ແລະ ການປະເມີນຜົນ 99
6.5 ການປະເມີນທັກສະ ແລະ ທັດສະນະຄະຕິ.....101
6.6 ຂໍ້ຜິດພາດທີ່ອາດສາມາດເກີດຂຶ້ນກັບການປະເມີນຜົນ.....102
6.7 ການປະເມີນຜົນການຮຽນການສອນໃນຫ້ອງຮຽນທີ່ມີນັກຮຽນຫລາຍຄົນ.....104

ພາກທີ I
ການສ້າງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ບົດທີ 1
ການຮຽນຮູ້ ກ່ຽວກັບການຮຽນ ແລະ ຜູ້ຮຽນ

1.1 ການຮຽນ ແລະ ການສອນ

ໃນຊຸດເຄື່ອງມືນີ້ໄດ້ເວົ້າວ່າ " ການຮຽນຮ່ວມ " ຫມາຍເຖິງການຮັບເດັກທຸກຄົນເຂົ້າຮຽນ ບໍ່ສະ ເພາະແຕ່ເດັກທີ່ມີຄວາມເປັນພິການເທົ່ານັ້ນ ຍັງລວມເອົາ**ເດັກທີ່ມີ** ພື້ນຖານ ແລະ ຄວາມສາມາດແຕກ ຕ່າງກັນ. ການເອົາເດັກເຂົ້າຮຽນໃນຫ້ອງຮຽນໄດ້ຖືວ່າເປັນການທ້າທາຍ ຄວາມສາມາດພຽງເຄິ່ງໜຶ່ງ ເທົ່ານັ້ນ ແລະ ອີກເຄິ່ງໜຶ່ງ ແມ່ນການສະໜອງການຮຽນຮູ້ທີ່ແຕກຕ່າງ ໃຫ້ແກ່ເດັກທຸກຄົນໄດ້ມີສ່ວນຮ່ວມໃນຂະບວນການຮຽນຮູ້.

ຫ້ອງຮຽນທີ່ມີເດັກຫຼາຍປະເພດ ພວກເຂົາກໍມີວິທີຮຽນແຕກຕ່າງກັນ. ຈາກຜົນການວິໄຈ ໃໝ່ໆໄດ້ໃຫ້ຮູ້ວ່າ '**ເດັກມີວິທີການຮຽນຮູ້ທີ່ແຕກຕ່າງກັນ** ຍ້ອນປັດໄຈທາງພັນທຸກໍາ, ປະສົບການ, ສະພາບ ແວດລ້ອມ ຫລື ບຸກຄະລິກສ່ວນຕົວຂອງເດັກເອງ'. ດັ່ງນັ້ນ, ຄູພວກເຮົາຈໍາເປັນຕ້ອງໃຊ້ **ວິທີສິດສອນ ແລະ ຈັດກິດຈະກໍາແບບຫລາກຫລາຍ** ເພື່ອເດັກຈະໄດ້ມີສ່ວນຮ່ວມແລະເກີດການ ຮຽນຮູ້ທີ່ແທ້ຈິງ.

ຄູຫລາຍຄົນສອນຫ້ອງຮຽນທີ່ມີເດັກຈໍານວນຫລາຍຄົນເກີນໄປ ອາດຈະມີຄວາມຫຍຸ້ງຍາກ ຖ້າຫາກ ວ່າ " ຄູຈະໃຊ້ວິທີ ສິດສອນແບບຫລາກຫລາຍ ເພື່ອໃຫ້ເຫມາະກັບເດັກແຕ່ລະຄົນ ໃນເມື່ອຫ້ອງຮຽນ ມີນັກຮຽນທີ່ແຕກຕ່າງກັນຫລາຍກວ່າ 50 ຄົນ "ຄວາມຈິງແລ້ວ, ນີ້ແຫລະຄືເຫດ ຜົນໜຶ່ງ ທີ່ວ່າເປັນຫຍັງ ຄູບາງຄົນ ຈຶ່ງຫັນມາໃຊ້ "ການຮຽນແບບນົກແກ້ວ" ຫລື ແບບທ່ອງຈໍາ. ພວກເຮົາພາກັນສອນແບບງ່າຍໆ ໂດຍເວົ້າຫລໍາໄປຫລໍາມາຄວາມເກົ່າ ແລ້ວກໍໃຫ້ນັກຮຽນເວົ້າ ຄືນແລ້ວຄືນອີກ ເພື່ອໃຫ້ເຂົາຈື່ໄດ້. ຖືວ່າເປັນວິທີທີ່ງ່າຍສໍາລັບການຄວບຄຸມຫ້ອງຮຽນ ທີ່ມີເດັກ ຈໍານວນຫລາຍ. ວິທີການແບບນີ້ເປັນສິ່ງທີ່ ໜ້າເບື່ອ ສໍາລັບເດັກ, ເດັກກໍຫມົດຄວາມມ່ວນຊື່ນ ແລະ ບໍ່ທ້າວທັນໃນການຮຽນ.ສ່ວນຄູເອງກໍບໍ່ເອົາຈິງເອົາຈັງ ກັບການສອນຂອງຕົນເອງ.

ເພື່ອຫັນປ່ຽນຈາກສະຖານະການທີ່ກ່າວນີ້,ຄູພວກເຮົາຈໍາຕ້ອງຮຽນຮູ້ວິທີສິດສອນອັນໃໝ່. ນັກຮຽນ ຈະມີຄວາມມ່ວນຊື່ນໃນແນວທາງການສອນ ແລະ ກິດຈະກໍາແບບຕ່າງໆ ທີ່ຈະເຮັດ ໃຫ້ພວກເຂົາຮຽນໄດ້ດີ, ແຕ່ສິ່ງສໍາຄັນເດັກທຸກຄົນກໍສາມາດຮຽນໄປດ້ວຍກັນໄດ້. ຄູຈໍານວນໜຶ່ງ ກໍເຄີຍນໍາໃຊ້ວິທີສິດສອນແບບຫລາກຫລາຍ ແລະ ໄດ້ພົບວ່າ ການສອນຄືແນວນີ້ຈະເປັນການ ເຮັດໃຫ້ນັກຮຽນມີສ່ວນຮ່ວມ ແລະ ຮັບເອົາຄວາມຮູ້ຈາກຄູຫລາຍຂຶ້ນ.

ກິດຈະກຳສະທ້ອນພາບ: ທ່ານເຄີຍຖືກສອນຢ່າງໃດ?

ຈົ່ງຄິດທົບທວນກ່ຽວກັບອາດີດຂອງທ່ານທີ່ເຄີຍຮຽນຢູ່ໂຮງຮຽນສາມັນ ແລະ ເມື່ອທ່ານຮຽນວິຊາຊີບຄູ, ຄູເລົ່ານັ້ນໄດ້ສອນ ທ່ານ ດ້ວຍວິທີສິດສອນຢ່າງໃດແດ່ ? ແລ້ວຂຽນກ່ຽວກັບບັນດາວິທີການເຫລົ່ານັ້ນ ໃສ່ຊ່ອງຫວ່າງໃນຕາຕະລາງລຸ່ມນີ້.

	ວິທີສິດສອນ (ແບບຕ່າງໆ)ທີ່ໃຊ້	**ໃຫ້ຄຳເຫັນ ວິທີການເຫລົ່ານີ້ ແມ່ນ ແບບຄູເປັນໃຈກາງ (ເຊັ່ນການຮຽນແບບທ່ອງຈຳ) ຫລື ແບບເດັກ(ຜູ້ຮຽນ)ເປັນໃຈກາງ**
ເມື່ອທ່ານຮຽນຢູ່ໂຮງຮຽນ		
ໃນລະຫວ່າງທີ່ທ່ານຮຽນເປັນຄູ		

ວິທີການສອນແບບໃດທີ່ຊ່ວຍທ່ານຮຽນໄດ້ດີທີ່ສຸດ? ທ່ານກຳລັງໃຊ້ມັນໃນຫ້ອງຮຽນຂອງທ່ານບໍ່? ເດັກນັກຮຽນຂອງທ່ານຕອບສະໜອງຕໍ່ວິທີເຫລົ່ານີ້ຄືແນວໃດ? ພວກເດັກຮຽນຢ່າງຫ້າວຫັນ ແລະ ມີຄວາມສຸກຫລືບໍ່ ຫລື ເຂົານັ່ງຟັງທ່ານຢ່າງງຸບໆ? ພວກເຂົາສອບເສັງປະຈຳພາກ/ປີ, ກວດກາປະຈຳເດືອນ ຫລື ກວດກາປຶກສາຕົໄດ້ດີຫລືບໍ່ແນວໃດ?

1.2 ການຮຽນຮູ້ຂອງເດັກ

ເດັກທຸກຄົນສາມາດຮຽນໄດ້ ຖ້າມີເງື່ອນໄຂທີ່ຖືກຕ້ອງເໝາະສົມ, ເດັກທຸກຄົນ ບໍ່ວ່າຍິງ ຫລື ຊາຍ ຈະສາມາດຮຽນໄດ້ຢ່າງມີປະສິດທິຜົນ, ໂດຍສະເພາະ ເມື່ອພວກເຂົາ “ທັ້ງຮຽນທັ້ງເຮັດ”.

ສຳລັບພວກເຮົາຫລາຍຄົນກໍຮຽນໄດ້ດີດ້ວຍການຮຽນແບບ “ທັ້ງຮຽນທັ້ງເຮັດ”. ນັ້ນກໍຄືການຮຽນ ໂດຍການເຮັດກິດຈະກຳຕົວຈິງ ແລະ ໄດ້ຮັບປະສົບການຈາກການປະຕິບັດ.

ສິ່ງເລົ່ານີ້ພວກເຮົາເອີ້ນກັນວ່າ “ ການຮຽນແບບຕັ້ງໜ້າ ”, “ ການມີສ່ວນຮ່ວມຂອງເດັກ ໃນການຮຽນຮູ້ ” ຫລື “ ການຮຽນຮູ້ແບບມີສ່ວນຮ່ວມ ”. ມັນເປັນການເຮັດໃຫ້ເດັກຮຽນຮູ້ຂໍ້ມູນຄວາມຮູ້ໃໝ່ ໂດຍຜ່ານກິດຈະກຳຕ່າງໆ ແລະ ວິທີການສອນແບບຫລາກຫາຍ. ກິດຈະກຳເຫລົ່ານີ້ມັກຈະກ່ຽວໂຍງກັບປະສົບການຊີວິດປະຈຳວັນ. ການເຊື່ອມໂຍງນີ້ ຊ່ວຍໃຫ້ເດັກເຂົ້າໃຈ ແລະ ຈື່ຈຳສິ່ງທີ່ພວກເຂົາຮຽນ ແລະ ນຳໃຊ້ສິ່ງທີ່ຮຽນເຂົ້າໃນການດຳລົງຊີວິດ.

ວິທີຮຽນຮູ້ແບບຕ່າງໆຂອງເດັກມີຄືແນວໃດແດ່?

ການຮູ້ວິທີຮຽນແບບແຕກຕ່າງກັນຂອງເດັກຈະຊ່ວຍຄູ ເພື່ອພັດທະນາກິດຈະກຳການຮຽນຮູ້ ທີ່ມີຄວາມຫມາຍຫລາຍຂຶ້ນ ສຳລັບເດັກ **ແລະ ຄູເອງ**. ວິທີຮຽນຮູ້ແບບຕ່າງໆຈະຊ່ວຍເດັກ ໂດຍສະເພາະເດັກທີ່ບໍ່ເຄີຍມີສ່ວນຮ່ວມ ໃນການຮຽນຮູ້ .

ການຮຽນຮູ້ແບບອິນຊີສຳພັດ: ການເຫັນ, ການໄດ້ຍິນສຽງ ແລະ ການເຄື່ອນໄຫວ

ໃນຕອນເຊົ້າເດັກນັກຮຽນຂອງທ່ານເຮັດຫຍັງແດ່? ເວລາພວກເຂົາເຂົ້າມາ ໃນຫ້ອງຮຽນທຳ ອິດຄິດວ່າ: ພວກເຂົາຈະຫລຽວເບິ່ງທ່ານ (ການເຫັນ), ຟັງທ່ານ (ການຍິນສຽງ) ແລະ ສັງເກດເບິ່ງ ທ່ານ ແລະ ຜູ້ອື່ນໆ ເຮັດຫຍັງຢູ່ (ການເຄື່ອນໄຫວ). ນັ້ນແມ່ນ ***ພວກເຂົາພວມຮຽນຮູ້ !***

ອິນຊີສຳພັດທັງສາມ: ການເຫັນ, ການໄດ້ຍິນສຽງ ແລະ ການເຄື່ອນໄຫວ ທັງຫມົດມີຄວາມ ສຳຄັນເພື່ອຊ່ອຍເດັກໃນການຮຽນຮູ້. ສຳລັບເດັກທີ່ມີຄວາມເປັນພິການ ເຂົາກໍຮຽນຮູ້ແບບຄ້າຍຄື ກັນກັບເດັກປົກກະຕິທົ່ວໄປ. ເຖິງຢ່າງໃດກໍຕາມ, ເດັກເຫລົ່ານີ້ອາດມີຂໍ້ຈຳກັດດ້ານໃດໜຶ່ງ ໃນ ການເຫັນ, ການຟັງ ແລະ ການເຄື່ອນໄຫວ ຈຶ່ງຮຽນຊ້າກວ່າເພື່ອນທີ່ປົກກະຕິ.

ຫລາຍປີຜ່ານມາ, ພວກເຮົາໄດ້ຮຽນຮູ້ວ່າ: ເດັກຮຽນໄດ້ຈາກການຟັງ 30%, ຈາກການເຫັນ 33% ແລະ ຜ່ານການເຄື່ອນໄຫວ 37%. ດັ່ງຄຳໂບຮານກ່າວໄວ້ວ່າ " ເມື່ອຂ້ອຍໄດ້ຍິນຂ້ອຍ ລືມ; ເມື່ອຂ້ອຍໄດ້ເຫັນຂ້ອຍຈື່ ; ເມື່ອຂ້ອຍໄດ້ເຮັດ ຂ້ອຍເຂົ້າໃຈ ". ຄຳກ່າວນີ້ສຳຄັນທີ່ສຸດ .

ວິທີຮຽນຮູ້ແບບຫລາກຫລາຍ

ເດັກບາງຄົນຮຽນໄດ້ດີໂດຍການອ່ານ ແລະ ການຈົດບັນທຶກ, ບາງຄົນກໍຮຽນໄດ້ດີເມື່ອ ໃຊ້ອຸປະກອນປະຈັກຕາ ແລະ ອີກບາງຄົນກໍຮຽນໄດ້ດີໂດຍຜ່ານການເຄື່ອນໄຫວ (ເຕັ້ນ/ຟ້ອນ, ກິລາ) ຫລື ຮຽນໄດ້ດີໂດຍຜ່ານກິດຈະກຳດົນຕີ/ຮ້ອງເພງ. ເດັກບາງຄົນ ມັກຮຽນ/ແກ້ໂຈດບັນຫາ ໂດຍລຳພັງ, ໃນຂະນະທີ່ ບາງຄົນມັກຮ່ວມກັບຄົນອື່ນ ເພື່ອຄົ້ນຫາຄຳຕອບຂອງໂຈດບັນຫາ. ຫມາຍຄວາມວ່າເດັກຮຽນຮູ້ດ້ວຍ ຫລາຍວິທີທາງ.

ການຄົ້ນພົບວິທີຮຽນຮູ້ແບບຕ່າງໆຂອງນັກຮຽນຢູ່ໃນຫ້ອງ, ພວກເຮົາຈະສາມາດຊ່ອຍເດັກ ທຸກຄົນຮຽນໄດ້ດີຂຶ້ນ ແລະ ກໍຈະໄດ້ຮັບຄວາມພໍໃຈ ຈາກການສອນຂອງເຮົາຫລາຍຂຶ້ນ.

ການຮຽນແບບຕັ້ງໜ້າ ແລະ ມີສ່ວນຮ່ວມສາມາດນຳໃຊ້ຫລາຍຮູບແບບ ເພື່ອຊ່ອຍເດັກ ຮຽນຮູ້. ວິທີ ຮຽນຮູ້ 7 ຢ່າງ ທີ່ເດັກໃຊ້ເພື່ອຮຽນຮູ້ປະກອບມີດັ່ງນີ້:

- ♦ ຮຽນຮູ້ຜ່ານຖ້ອຍຄຳ ຫລື ພາສາ: ເດັກບາງຄົນຄົ້ນຄິດ ແລະ ຮຽນຮູ້ຜ່ານຖ້ອຍຄຳຕ່າງໆ ທີ່ຂຽນ ແລະ ເວົ້າ, ການທ່ອງຈຳ ແລະ ການເລົ່າຄືນ.
- ♦ ຮຽນຮູ້ຜ່ານຕະກະວິທະຍາ ແລະ ຄະນິດສາດ: ເດັກບາງຄົນຄົ້ນຄິດ ແລະ ຮຽນຮູ້ຜ່ານ ການສະແດງເຫດຜົນ ແລະ ການຄຳນວນ. ພວກເຂົາສາມາດໃຊ້ຕົວເລກໄດ້ຢ່າງງ່າຍ ດາຍ, ຄິດໄດ້/ຄິດອອກຕົວແບບທີ່ເປັນນາມມະທຳ ຫລື ເຂົ້າໃຈຍາກ ແລະ ໃຊ້ການວັດ ທີ່ແມ່ນຍຳ.

- ຮຽນຮູ້ຜ່ານການມອງເຫັນ ຫລື ເຂົ້າໃຈຄວາມສຳພັນລະຫວ່າງສິ່ງຕ່າງໆ: ເດັກບາງຄົນ ມັກສິລະປະເຊັ່ນ ການແຕ້ມຮູບ, ລະບາຍສີ ຫລື ແກະສະຫລັກ. ເດັກເຫລົ່ານີ້ສາມາດ ອ່ານແຜນທີ່, ແຜນພູມ ແລະແຜນພາບຕ່າງໆໄດ້ຢ່າງງ່າຍດາຍ.
- ຮຽນຮູ້ຜ່ານການໃຊ້ຮ່າງກາຍ ຫລື ການເຄື່ອນໄຫວ: ເດັກບາງຄົນຮຽນຮູ້ ໂດຍຜ່ານ ການເຄື່ອນໄຫວຂອງຮ່າງກາຍ, ເກມ ແລະ ຫລິ້ນລະຄອນ.
- **ຮຽນຮູ້ໂດຍຜ່ານດົນຕີ/ເພງຫລືຈັງຫວະ:** ເດັກບາງຄົນຮຽນໄດ້ດີທີ່ສຸດ ໂດຍຜ່ານການ ອອກສຽງ, ຄຳສຳພັດ/ຄຳກອນ, ຈັງຫວະ ແລະ ການຊ້ຳ.
- **ຮຽນຮູ້ໂດຍຜ່ານການປະຕິສັນຖານກັບຄົນອື່ນ:** ເດັກບາງຄົນຮຽນຮູ້ໄດ້ໂດຍງ່າຍໃນກຸ່ມ ໂດຍ ຜ່ານການຮຽນແບບຮ່ວມມື. ພວກເຂົາມ່ວນຊື່ນກັບກິດຈະກຳກຸ່ມ, ພວກເຂົາ ເຂົ້າໃຈສະຖານະການສັງຄົມໄດ້ດີ ແລະ ສາມາດພັດທະນາ ຄວາມສຳພັນກັບຄົນອື່ນ ໄດ້ຢ່າງງ່າຍ.
- **ຮຽນຮູ້ໂດຍລຳພັງ:** ເດັກບາງຄົນຮຽນຮູ້ໄດ້ດີໂດຍໃຊ້ສະມາທິສ່ວນຕົວ ແລະ ການສະ ທ້ອນກັບພາບຕົວເອງ. ພວກເຂົາສາມາດເຮັດວຽກໂດຍລຳພັງ, ຮັບຮູ້ເຖິງຄວາມຮູ້ສຶກ ຂອງຕົນເອງ ແລະ ຮູ້ຈຸດແຂງ ແລະ ຈຸດອ່ອນຂອງຕົນ.

ຄູສອນພວກເຮົາຕ້ອງປັບປຸງແຜນການສອນ ແລະ ການຄຸ້ມຄອງບໍລິຫານຫ້ອງຮຽນ ໃນແນວ ທາງທີ່ເຊື່ອໝັ້ນວ່າຈະເກີດການຮຽນຮູ້ແບບຕັ້ງໜ້າ ແລະ ມີປະສິດທິຜົນສຳລັບເດັກທຸກຄົນ.

ກິດຈະກຳສະທ້ອນພາບ: ການປັບປຸງບົດສອນຂອງທ່ານ

- ເອົາບົດສອນໜຶ່ງບົດ ທີ່ທ່ານສະໜຸກສະໜານ ໃນການສອນຂຶ້ນມາແຕ່ນັກຮຽນຂອງ ທ່ານຊ້ຳພັດ ບໍ່ອາດສາມາດຮຽນໄດ້ດີດັ່ງທີ່ທ່ານຄາດຫມາຍໄວ້. ອີກວິທີໜຶ່ງ ໃຫ້ຍົບເອົາ ບົດສອນ ທີ່ທ່ານຢາກສອນແບບ ໃຫ້ສະໜຸກສະໜານ.
- ຈຸດສຳຄັນ (ຂໍ້ມູນຄວາມຮູ້) ທີ່ທ່ານຕ້ອງການໃຫ້ເດັກຮຽນຮູ້ຄືອັນໃດ?
- ທ່ານໃຊ້ວິທີການໃດ ເພື່ອສື່ສານຂໍ້ມູນຄວາມຮູ້ນີ້? ເປັນຫຍັງທ່ານຄິດວ່າມັນໃຊ້ບໍ່ໄດ້ ຜົນ? ຕົວຢ່າງ: ເດັກໃຊ້ວິທີຮຽນຮູ້ໜຶ່ງວິທີດຽວບໍ່?
- ກິດຈະກຳຕ່າງໆທີ່ທ່ານສາມາດໃຊ້ໃນການສິດສອນຂອງ ທ່ານ ເພື່ອໃຫ້ເດັກສາມາດ ໃຊ້ອິນຊີ ສຳພັດຫລາຍດ້ານ(ການເຫັນ, ການຟັງສຽງ, ສຳພັດ, ການເຄື່ອນໄຫວ) ໃນ ການຮຽນຮູ້ມີຄືແນວໃດ? ວິທີການຮຽນຮູ້ທີ່ແຕກຕ່າງກັນອັນໃດແດ່ ທີ່ກິດຈະກຳເຫລົ່ານີ້ຈຳເປັນຕ້ອງໃຊ້? (ເບິ່ງແນວຄວາມຄິດຂອງຄູຂ້າງເທິງ).
- ທ່ານຈະສາມາດສອດແຊກກິດຈະກຳເຫລົ່ານີ້ເຂົ້າໃນແຜນການສອນໄດ້ ຢ່າງໃດ?
- ເດັກຈະສາມາດປະກອບສ່ວນອອກແບບບົດສອນໄດ້ຢ່າງໃດ, ໂດຍສະເພາະເດັກພິ ເສດ ຫລື ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ?


- ທົດລອງເຮັດຈັກບົດເບິ່ງ!ຖ້າທ່ານຮູ້ສຶກສະດວກທີ່ຈະເຮັດ, ໃຫ້ຖາມນັກຮຽນຂອງທ່ານ ວ່າພວກ ເຂົາສະໜຸກສະໜານກັບບົດຮຽນບໍ່. ກິດຈະກຳອັນໃດແດ່ ທີ່ເດັກນັກຮຽນມັກ ທີ່ສຸດ? ທ່ານສາ ມາດໃຊ້ກິດຈະກຳເຫລົ່ານີ້ ເພື່ອສອນບົດຮຽນອື່ນໄດ້ບໍ່?

ອຸປະສັກຂອງການຮຽນຮູ້

ຈາກການວິໄຈຍັງພົບວ່າ ເດັກຂີ້ອາຍ,ບໍ່ມັກມີສ່ວນຮ່ວມ, ບໍ່ເຄີຍຍົກມືໃນຫ້ອງຮຽນເລີຍບໍ່ມີ ຄວາມເຊື່ອໝັ້ນ ໃນຄວາມສາມາດຂອງຕົນເອງ ຫລື ອາດຄິດວ່າຕົນເປັນສະມາຊິກ ທີ່ດ້ອຍຄ່າ ໃນຫ້ອງຮຽນ ແລະ ກຳຮຽນບໍ່ໄດ້ດີ. ໜຶ່ງໃນເຫດຜົນຂອງເດັກທີ່ມີພຶດຕິກຳແບບນີ້ ອາດເປັນເພາະ ວ່າພວກເຂົາມີຄວາມພາກພູມໃຈໃນຕົວເອງຕ່ຳ. ຍ້ອນການຕຳນິສິ່ງຂ່າວທີ່ເປັນທາງລົບນັ້ນ ໃນບໍ່ ຊ້າເດັກຈະບໍ່ຕັ້ງໃຈຮຽນ ແລະ ສອບບໍ່ຜ່ານ ສຸດທ້າຍກໍ່ຈະປະລະການຮຽນໄປເລີຍ.

ກິດຈະກຳເພື່ອປະຕິບັດ: ຄຸນຄ່າໃນຄວາມພາກພູມໃຈຂອງຕົນເອງ

ຈົ່ງເອົາເຈ້ຍຂາວມາໜຶ່ງແຜ່ນ ແລ້ວແຕ້ມຮູບໜ້າຄົນແບບງ່າຍໆ. ນີ້ຄືໜຶ່ງໃນເດັກນັກຮຽນ ຂອງທ່ານ. ໃຫ້ຄິດເຖິງສິ່ງທີ່ຜູ້ໃຫຍ່ອາດຈະເວົ້າກັບເດັກ ແລ້ວເຮັດໃຫ້ເດັກຮູ້ສຶກທໍ້ຖອຍລົງໃນ ຕົວເອງ. ສຳລັບແຕ່ລະຕົວຢ່າງ ທີ່ທ່ານສາມາດຄິດ ຫລື ສັງເກດເຫັນໃນຮອບອາທິດ, ໃຫ້ຈີກເຈ້ຍ ແຜ່ນນັ້ນຖິ້ມໄປ.



ພຽງສາມ ຫລື ສີ່ຂໍ້ວິຈານຮຸນແຮງຄືແນວນີ້ ກໍຈະເຮັດໃຫ້ຄວາມພາກພູມໃຈໃນຕົນເອງຂອງເດັກ ຫາຍໄປ.

ຄວນຈົດຈຳໄວ້ວ່າ: ທ່ານສາມາດປະຕິບັດກິດຈະກຳນີ້ກັບເດັກ ເພື່ອຊ່ວຍໃຫ້ເຂົາເຂົ້າໃຈ ຄວາມຮູ້ສຶກຂອງຄົນອື່ນ ແລະ ໃຫ້ເຂົ້າໃຈວ່າການກະທຳເຊັ່ນນັ້ນກະທົບຕໍ່ຄວາມຮູ້ສຶກນັ້ນຄືແນວ ໃດ?

ເມື່ອເຮົາໄດ້ຍິນຄຳເຫັນ ຫລື ຄຳຕຳນິວິຈານທີ່ເປັນທາງລົບເກີດຂຶ້ນກັບເດັກ, ພວກເຮົາຕ້ອງ ປ່ຽນມັນກັບມາເປັນທາງບວກ ເຊັ່ນຕົວຢ່າງ: ຄຳເຫັນທີ່ເປັນລົບ “ເບິ່ງແມ໋ ຕອບຜິດຕັ້ງຫລາຍຂໍ້” ອາດ ສາມາດປ່ຽນເປັນ “ເບິ່ງດູ໋ເອີ ຕອບຖືກຕັ້ງຫລາຍຂໍ້. ມາລອງຊ່ວຍກັນຫາທາງ ເພື່ອວ່າເຈົ້າຈະຕອບໃຫ້ ຖືກຫລາຍຂຶ້ນໃນເທື່ອ ໜ້າ. ແມ່ນຫຍັງນໍ ຊ່ວຍໃຫ້ຈື່ຄຳຕອບຂໍ້ທີ່ເຈົ້າເຮັດຖືກ”

ເດັກຕ້ອງເຊື່ອໝັ້ນວ່າພວກເຂົາສາມາດຮຽນຮູ້ໄດ້. ເດັກຈະພັດທະນາຄວາມພາກພູມໃຈໃນ ຕົນເອງ ແລະ ຄວາມເປັນເອກະລັກຂອງເຂົາ ເມື່ອເຕີບໂຕຂຶ້ນ ແລະ ຜູ້ໃຫຍ່ເປັນຜູ້ທີ່ມີບົດບາດ ເຂັ້ມແຂງ.

ເງື່ອນໄຂທີ່ຖືກຕ້ອງເພື່ອໃຫ້ເດັກພັດທະນາຄວາມເຊື່ອໝັ້ນຂຶ້ນເລື້ອຍໆເດັກທຸກຄົນຄວນຈະ:

- ຮູ້ສຶກວ່າ ພວກເຂົາ ແລະ ການປະກອບສ່ວນຂອງເຂົາມີຄຸນຄ່າ;
- ຮູ້ສຶກປອດໄພ (ດ້ານກາຍະພາບກໍຄືດ້ານຄວາມຮູ້ສຶກ) ຢູ່ໃນສະພາບແວດລ້ອມແຫ່ງ ການຮຽນຮູ້ຂອງພວກເຂົາ; ແລະ ຮູ້ສຶກວ່າ ພວກເຂົາມີເອກະລັກສະເພາະ ແລະ ຄວາມ ຄິດເຫັນຂອງ ພວກເຂົາ ຖືກຕີລາຄາສູງ.

ກິດຈະກຳເພື່ອປະຕິບັດ: ການປັບປຸງຄວາມພາກພູມໃຈໃນຕົນເອງ

ກິດຈະກຳນີ້ ເໝາະສົມສຳລັບຄູ, ນັກຮຽນ, ຜູ້ປົກຄອງ ຫລື ຜູ້ທີ່ກ່ຽວຂ້ອງ.

- ແບ່ງ 3 ຊ່ອງເທົ່າກັນໃນເຈ້ຍແຜ່ນໃຫຍ່ ຫລື ສິ່ງທີ່ເໝາະສົມສາມາດຂຽນໄດ້.
- ໃນຊ່ອງດ້ານຊ້າຍມືໃຫ້ຂຽນສະຖານະການຕ່າງໆ ໃນຫ້ອງຮຽນ ຫລື ໂຮງຮຽນຂອງ ທ່ານ ເຊິ່ງເປັນສະຖານະການທີ່ນັກຮຽນອາດ**ບໍ່**ຮູ້ສຶກວ່າຕົນເອງມີຄຸນຄ່າ, ບໍ່ປອດໄພ ຫລື ບໍ່ມີ ເອກະລັກສະເພາະ.
- ໃນຊ່ອງກາງຖັດຈາກ ແຕ່ລະສະຖານະການທີ່ຂຽນລົງກ່ອນນັ້ນ, ໃຫ້ຂຽນວ່າເປັນຫຍັງ ທ່ານ ຈຶ່ງຄິດວ່າສະພາບແວດລ້ອມຂ້າງນອກ ຫລື ຄົນຂ້າງນອກ ເຮັດໃຫ້ເດັກມີຄວາມ ຮູ້ສຶກເຊັ່ນນັ້ນ.
- ໃນຊ່ອງຂວາມືສຸດ, ໃຫ້ຂຽນສິ່ງທີ່ສາມາດປ່ຽນແປງໄດ້ ເພື່ອເຮັດໃຫ້ເດັກຮູ້ສຶກວ່າຕົນ ເອງມີຄຸນຄ່າ, ປອດໄພ ແລະ ມີເອກະລັກສະເພາະ ລວມທັງການປ່ຽນແປງເຫລົ່ານີ້ຈະ ສາມາດ ເກີດຂຶ້ນໄດ້ຢ່າງໃດ?

ຈົ່ງໃຊ້ກິດຈະກຳນີ້ເປັນຈຸດເລີ່ມ ເພື່ອພັດທະນາແຜນປະຕິບັດການປັບປຸງຄວາມພາກພູມ ໃຈໃນຕົນເອງ ແລະ ການຮຽນຮູ້ໃນຫ້ອງຮຽນ, ໂຮງຮຽນ ແລະ ຊຸມຊົນຂອງທ່ານ.

ເດັກຫ້າວຫັນຄົ້ນຄ້ວາຫາຄວາມຮູ້ ແລະ ຮູ້ຄວາມຫມາຍຂອງຕົນເອງ

ເດັກຮຽນຮູ້ໂດຍການເຊື່ອມໂຍງຄວາມຮູ້ໃໝ່ກັບຄວາມຮູ້ທີ່ຮູ້ກ່ອນແລ້ວ. ສິ່ງນີ້ ເອີ້ນວ່າການ ກໍ່ສ້າງປັນຍາ. ການເວົ້າຈາກັນ ແລະ ຖາມຄຳຖາມຮ່ວມກັນ (ການພົວພັນທາງສັງຄົມ) ສາມາດ

ປັບປຸງການຮຽນຮູ້, ນີ້ຄືເຫດຜົນທີ່ວ່າເປັນຫຍັງການເຮັດວຽກເປັນຄູ່ ແລະ ກຸ່ມນ້ອຍຈຶ່ງມີຄວາມສຳຄັນຫລາຍ.

ບົດບາດຂອງພວກເຮົາໃນຖານະເປັນຄູ ບໍ່ແມ່ນຈະຖອກເທຂໍ້ມູນຄວາມຮູ້ໃສ່ໃນສະໝອງເດັກ ; ເຊັ່ນດຽວກັນ ການປ່ອຍໃຫ້ເດັກຄົ້ນຫາໃຫ້ພົບທຸກສິ່ງຢ່າງດ້ວຍຕົນເອງ ກໍເປັນການກະທຳທີ່ບໍ່ຖືກຕ້ອງ. ພວກເຮົາຄວນຫ້າວຫັນຊອກຫາຊ່ອງທາງສະໜັບສະໜູນການຮຽນຮູ້ ເຊິ່ງຕ້ອງນຳໃຊ້ຂໍ້ມູນຄວາມຮູ້ທີ່ເດັກຮູ້ກ່ອນແລ້ວ.

ໃນກໍລະນີເຊັ່ນນີ້ ທ່ານຕ້ອງສ້າງຄວາມສຳພັນທີ່ດີກັບເດັກ ເພື່ອວ່າຈະສາມາດເຂົ້າໃຈວ່າເດັກສາມາດຮຽນຮູ້ໄດ້ດີທີ່ສຸດຄືແນວໃດ? **ຕົວຢ່າງ** ວຽກງານງ່າຍໆອັນໃດເດັກຄົນນີ້ສາມາດເຮັດໄດ້? ຕົວອັກສອນຕົວໃດໃນຊື່ຂອງເດັກທີ່ລາວຮູ້ ແລະ ສາມາດກ່າຍຄືນພໍໄດ້ ? ມີຕົວເລກຕົວໃດແດ່ທີ່ລາວຮູ້ ແລະ ສາມາດສຳພັນກັບສິ່ງຂອງຕ່າງໆໃນຫ້ອງ? ມີສິ່ງໃດທີ່ເດັກຄົນນີ້ມັກເປັນພິເສດ ແລະ ສາມາດເວົ້າລົມໄດ້ກັບຄູ, ກັບເພື່ອນ ຫລື ພ້ອມທັງກັບຕຸກກະຕາມືແບບງ່າຍໆ ໃນຫ້ອງຮຽນ? ເດັກຄົນນີ້ສາມາດຮ້ອງ ເພງ ຫລື ຫລິ້ນເກມໄດ້ບໍ່ ?

ກິດຈະກຳເພື່ອປະຕິບັດ: ການເຊື່ອມສຳພັນລະຫວ່າງຄອບຄົວກັບຫ້ອງຮຽນ

ໃນຕາຕະລາງລຸ່ມນີ້, ໃຫ້ຂຽນກິດຈະກຳຕ່າງໆ ທີ່ເດັກນັກຮຽນຂອງ ທ່ານ ອາດໄດ້ຮຽນຮູ້ມາແລ້ວທີ່ ຄອບຄົວ ແລະ ສາມາດນຳມາໃຊ້ໃນໂຮງຮຽນໄດ້ດ້ວຍ.

ທ່ານຈະສາມາດສອດແຊກຂໍ້ມູນຄວາມຮູ້ເຂົ້າໃນແຜນການສອນໄດ້ແນວໃດ ?ທ່ານຈະສາມາດນຳເອົາເດັກເຂົ້າມີສ່ວນຮ່ວມ ໃນການອອກແບບບົດສອນໄດ້ແນວໃດ ?

ຊື່ເດັກນັກຮຽນ	**ສິ່ງໃດແດ່ທີ່ເດັກໄດ້ຮຽນຢູ່ຄອບຄົວແລ້ວ**	**ສິ່ງທີ່ເດັກໄດ້ຮຽນໃນຄອບຄົວຈະສາມາດນຳໃຊ້ທີ່ໂຮງຮຽນໄດ້ຢ່າງໃດ?**

ບໍ່ມີເດັກຄົນໃດມາໂຮງຮຽນໂດຍບໍ່ໄດ້ຮຽນຮູ້ຫຍັງມາຈາກຄອບຄົວ ຫລື ຈາກຊຸມຊົນຂອງເຂົາ. ບໍ່ວ່າຈະຢູ່ໃນ ຫລື ຢູ່ນອກໂຮງຮຽນ, ເດັກນັກຮຽນຈະສະໜອງຕອບຕໍ່ສະຖານະການໃໝ່ດ້ວຍຫລາຍວິທີທາງ. ບາງວິທີກໍເປັນປະໂຫຍດ ແຕ່ບາງວິທີກໍອາດບໍ່ເປັນປະໂຫຍດ. ມັນເປັນຄວາມຮັບຜິດຊອບຂອງເຮົາໃນການຊອກຫາສິ່ງທີ່ເດັກຮູ້ ແລະ ມີທັກສະ ຄວາມສາມາດທີ່ເດັກມີຢູ່. ຈາກນັ້ນ ພວກເຮົາຈະສາມາດອີງໃສ່ຄວາມຮູ້ ແລະ ທັກສະຂອງເຂົາເພື່ອສອນສິ່ງໃໝ່. ເພື່ອຈະເຮັດໄດ້ຄືແນວນີ້, ພວກເຮົາຕ້ອງສັງເກດເດັກ ຢ່າງໃກ້ຊິດ ແລະ ເບິ່ງວ່າພວກເຂົາຮຽນຮູ້ແນວຄິດ, ທັກສະ ແລະ ຄ່ານິຍົມໃໝ່ຄືແນວໃດ. ໃນຫລາຍກໍລະນີ, ປະສົບການຂອງເດັກຍິງຈະແຕກຕ່າງຈາກເດັກຊາຍ.

ກິດຈະກຳເພື່ອປະຕິບັດ: ການສ້າງຄວາມເຊື່ອມສຳພັນສຳລັບນັກຮຽນ

ໃນລະດັບພື້ນຖານ,ໂຮງຮຽນຕ່າງໆ ຈະສອນເດັກໃຫ້ຮູ້ວິທີອ່ານແລະນຳໃຊ້ຕົວເລກ. ໃນເມື່ອເດັກມາໂຮງຮຽນຈະມີກິດຈະກຳງ່າຍໆຫຍັງແດ່? ທີ່ທ່ານສາມາດເຮັດໄດ້ ເພື່ອສົ່ງເສີມໃຫ້ເດັກສາມາດຮຽນອ່ານ ແລະ ຄຳນວນເລກໄດ້ສຳເລັດ? ພວກເຮົາມີບາງຕົວຢ່າງໃຫ້ທ່ານເບິ່ງ. ທ່ານສາມາດຄິດຕົວຢ່າງອື່ນໆ ອີກໄດ້ບໍ່?

- ♦ ໂດຍຮ່ວມກັບເດັກນັກຮຽນ, ໃຫ້ຕິດປ້າຍຊື່ສິ່ງຂອງຕ່າງໆ ອ້ອມຫ້ອງຮຽນຕາມຊື່ ທີ່ເຮົາໃຫ້ເຂົາ (ຕາມພາສາທີ່ເດັກໃຊ້) ເຊັ່ນ ໂຕະ, ຕັ່ງ, ຊື່ເດັກເທິງໜ້າໂຕະ, ຕົວເລກທີ່ຈັດເປັນກຸ່ມດ້ວຍສິ່ງຂອງຕ່າງໆ.... ມີເດັກຄົນໃດແດ່ ທີ່ສາມາດບອກຄວາມສຳພັນລະຫວ່າງສິ່ງຂອງຕ່າງໆ ກັບ ຄຳສັບ ທີ່ໃຊ້ເອີ້ນຊື່ນັ້ນ?
- ♦ ຕ້ອງແນ່ໃຈວ່າທ່ານໄດ້ບອກເດັກແຕ່ລະຄົນຢ່າງໜ້ອຍໜຶ່ງຢ່າງທີ່ເດັກສາມາດເຮັດໄດ້ດີ
- ♦ ຂຽນຄຳຕ່າງໆຈາກເພງທີ່ເດັກຮູ້ ຫລື ສາມາດຮຽນໄດ້ໄວ. ລອງເບິ່ງວ່າ ໃຜສາມາດເດົາໄດ້ວ່າ ຄຳໃດເປັນຄຳໃດ. ຄຳສັບໃໝ່ສາມາດນຳເຂົ້າມາ ໃນເພງທີ່ເດັກຮູ້ດີມາກ່ອນ. ການຮ້ອງເພງ ແມ່ນພາກສ່ວນໜຶ່ງທີ່ສຳຄັນຂອງການຮຽນຮູ້ ເພາະມັນຊ່ວຍການຫາຍໃຈຂອງເດັກ, ປະກອບຄຳສັບ, ຈັງຫວະ ແລະ ການສຳຜັດ. ມັນຍັງເປັນການສ້າງຄວາມສາມະຄີພາຍໃນ ຫ້ອງຮຽນອີກດ້ວຍ.
- ♦ ການໃຫ້ຄຳແນະນຳຕ່າງໆໃນຫ້ອງຮຽນຕ້ອງຈະແຈ້ງຊັດເຈນ. ຈັດຕັ້ງນັກຮຽນເກົ່າຊ່ວຍເຫລືອນັກຮຽນໃໝ່ ໃຫ້ເຂົ້າໃຈຄຳແນະນຳທີ່ທ່ານບອກ.

ໃນຫ້ອງຂອງ ທ່ານ ອາດຈະມີເດັກ ເຊິ່ງບໍ່ສາມາດເວົ້າພາສາທີ່ນັກຮຽນສ່ວນຫລາຍໃນຫ້ອງຮຽນໃຊ້ກັນ. ໃນກໍລະນີເຊັ່ນນີ້, ສິ່ງສຳຄັນກໍຄື ຕ້ອງຄົ້ນຫາໃຫ້ໄດ້ວ່າ ເດັກຄົນນີ້ສາມາດເຮັດຫຍັງໄດ້ແດ່ ? ຈະມີປະໂຫຍດຖ້າຫາກ ທ່ານສາມາດໂອ້ລົມກັບລາວໄດ້ແບບສ່ວນຕົວ, ເອີ້ນຊື່ຂອງລາວຕາມພາສາທີ່ລາວໃຊ້. ຖ້າເຮັດບໍ່ໄດ້, ໃຫ້ຫາເດັກຄົນອື່ນ ຫລື ອາດຫາຄົນອື່ນ ໃນຊຸມຊົນຜູ້ທີ່ສາມາດຊ່ວຍທ່ານສື່ສານ ແລະ ສ້າງສາຍສຳພັນລະຫວ່າງ ພາສາທີ່ລາວໃຊ້ ກັບກິດຈະກຳຂອງຫ້ອງຮຽນ. ຕົວຢ່າງ ເຊັ່ນ ທ່ານສາມາດ ໃຊ້ເພງທີ່ເປັນພາສາແມ່ຂອງເດັກ ເພື່ອສອນຄຳສັບໃໝ່ທີ່ໃຊ້ສອນໃນຫ້ອງຮຽນຂອງທ່ານໄດ້ບໍ່ ? ຄຳສັບຕ່າງໆຂອງເພງທີ່ເດັກຮູ້ເປັນພາສາແມ່ຂອງເຂົາສາມາດຈະໃຊ້ຄຳສັບຂອງຫ້ອງຮຽນແທນເທື່ອລະໜອ້ຍ.ທ່ານສາມາດໃຊ້ເພງນີ້ສອນເດັກທຸກຄົນກ່ຽວກັບຄຸນຄ່າຂອງການມີຫລາກຫລາຍພາສາແຕກຕ່າງກັນໄດ້ ຫລືບໍ່ ?

ໂດຍການສ້າງກິດຈະກຳງ່າຍໆ ທີ່ເດັກສາມາດເຮັດໄດ້ສຳເລັດ, ສະເພາະໃນຊ່ວງເລີ່ມຕົ້ນຂອງປີຮຽນທັງໆ ເດັກຂີ້ອາຍທີ່ສຸດກໍອາດຈະອອກຕົວໄດ້ດີດ້ວຍການເລີ່ມຕົ້ນທີ່ດີ. ພວກເຂົາຈະໝັ້ນໃຈວ່າໂຮງຮຽນເປັນສະຖານທີ່ດີໜ້າຢູ່, ເປັນບ່ອນທີ່ພວກເຂົາຮູ້ສຶກປອດໄພ, ເປັນສະຖານທີ່ເພື່ອສຳຫລວດ ແລະ ຮຽນຮູ້. ນັ້ນຄື**ການຮຽນຮູ້ແບບເປັນເພື່ອນມິດ.**

ພິເສດສຳລັບການສອນ ແລະ ການຮຽນຮູ້

- ບົດສອນຕ່າງໆຈຳເປັນຕ້ອງຂຽນເປັນໂຄງອ້ອມຮອບ “ຄວາມຄິດສຳຄັນ” ແທນທີ່ຈະຂຽນໂຄງແບບແຍກເປັນຊິ້ນສ່ວນຂໍ້ມູນຄວາມຮູ້ທີ່ບໍ່ຕິດພັນກັນ. ດ້ວຍວິທີນີ້, ເດັກຈະປຽບເທຽບວ່າ ມີຄັນຮົ່ມອັນໜຶ່ງ ເຊິ່ງໃຕ້ຄັນຮົ່ມດັ່ງກ່າວ ເຂົາຈະສາມາດບັນຈຸຂໍ້ມູນຄວາມຮູ້ໃໝ່ໃສ່ກັບ ຂໍ້ມູນຄວາມຮູ້ເກົ່າທີ່ຮຽນມາກ່ອນແລ້ວ. ຄວາມຄິດທີ່ສຳຄັນສາມາດເປັນບາງສິ່ງເທຽບກັບ“ນ້ຳມີ ຄວາມສຳຄັນ ແກ່ຊີວິດ” ແລະ ຫົວຂໍ້ອາດສາມາດປຽບ ເທຽບ “ມື້ນີ້ ເຮົາຈະຮຽນວິທີຮັກສານ້ຳໃຫ້ສະອາດ”.
- ເຮົາຈຳເປັນຕ້ອງພິຈາລະນາຄວາມຕ້ອງການ ໃນການພັດທະນາຂອງເດັກ. ເດັກບາງຄົນຈະຕ້ອງການເວລາຫລາຍກວ່າຜູ້ອື່ນ ເພື່ອພັດທະນາຄວາມກ້າວໜ້າ.
- ພວກເຮົາຈຳເປັນຕ້ອງເປັນຜູ້ຄອຍຊ່ວຍເຫລືອການຮຽນຮູ້ ແລະ ຈົດຈຳຈຸດພິເສດຂອງເດັກໆ ນັກຮຽນຂອງພວກເຮົາ. ສະພາບແວດລ້ອມຂອງການຮຽນຮູ້ ຄວນສະໜັບສະໜູນຜູ້ຮຽນທັງຫມົດ.
- ນັກຮຽນຈຳເປັນຕ້ອງເວົ້າລົມຮ່ວມກັບຄູ ແລະ ເພື່ອນຂອງຕົນໃນເວລາເຮັດກິດຈະກຳ ບໍ່ວ່າຈະເປັນກິດຈະກຳແບບເຮັດຄົນດຽວ ຫລື ເປັນກຸ່ມ.
- ພວກເຮົາຈຳເປັນຕ້ອງວາງແຜນກິດຈະກຳ ເພື່ອກະຕຸ້ນໃຫ້ເດັກທັງຫມົດເຮັດວຽກ ເປັນທີມ ເຊັ່ນ ການເຮັດວຽກເປັນຄູ່ ຫລື ເປັນກຸ່ມນ້ອຍຕາມໆການທີ່ເຫມາະສົມສອດຄ່ອງ.
- ນັກຮຽນຕ້ອງສາມາດຄົ້ນຫາຫລັກສູດທີ່ເປັນປະໂຫຍດແກ່ຕົນເອງ, ໄດ້ຮັບການກະຕຸກຊຸກຍູ້ ໃຫ້ຖາມຄຳຖາມ ແລະ ພິຈາລະນາຂໍ້ມູນຄວາມຮູ້ ແລະ ສາມາດສ້າງຄວາມເຂົ້າໃຈດ້ວຍຕົນເອງ ເນື້ອໃນວິຊາຮຽນ.
- ພວກເຮົາຕ້ອງຕັ້ງຄຳຖາມທີ່ດີ ເພື່ອຈະໃຫ້ນັກຮຽນອະທິບາຍແນວຄວາມຄິດເຫັນຂອງເຂົາແທນທີ່ຈະມັກຕັ້ງຄຳຖາມທີ່ຕ້ອງ ໃຫ້ຕອບວ່າ "ແມ່ນ" ຫລື "ບໍ່ແມ່ນ", "ຖືກ" ຫລື "ບໍ່ຖືກ". ພວກເຮົາ ຕ້ອງຕັ້ງຄຳຖາມປາຍເປີດ (Open-ended questions) ເພື່ອໃຫ້ນັກຮຽນສະແດງຈຸດຢືນ, ຄວາມຄິດຄວາມເຫັນຂອງຕົນອອກມາຍົກຕົວຢ່າງ ພວກເຮົາສາມາດຕັ້ງຄຳຖາມທີ່ລົງທ້າຍ ດ້ວຍ "ນ້ອງນັກຮຽນຄິດຢ່າງໃດ ຫລື ຄິດແນວໃດ"
- ຄຳຖາມທີ່ຕ້ອງການຄວາມຄິດເຫັນທີ່ລູຕັ້ງຂຶ້ນ ແລະ ການສົນທະນາອະພິປາຍຢ່າງຫ້າວຫັນລະຫວ່າງນັກຮຽນຈະກະຕຸ້ນ ໃຫ້ເຂົາຄົ້ນຄວ້າຫາຂໍ້ມູນຄວາມຮູ້. ການປະຕິສຳພັນກັບຄົນອື່ນ, ການໄດ້ຮັບຂໍ້ມູນຄວາມຮູ້ໃໝ່ ແລະ ການສະທ້ອນ ຫລື ສະແດງຄວາມຄິດເຫັນຈະຊ່ວຍເດັກ ນັກຮຽນສ້າງຄວາມຮູ້ໃໝ່.

ສິ່ງທີ່ຄວນຈື່: ກ່ອນຈະເລີ່ມຕົ້ນສອນບົດຮຽນໃໝ່, ທ່ານຈຳເປັນຕ້ອງຖາມນັກຮຽນທຸກຄົນວ່າ ພວກເຂົາຮູ້ຫຍັງແດ່ແລ້ວກ່ຽວກັບຫົວຂໍ້ນີ້. ການຖາມຄືແນວນີ້ຈະຊ່ວຍ ໃຫ້ນັກຮຽນຄິດກ່ຽວໂຍງເຖິງຫົວຂໍ້ທີ່ຈະຮຽນ, ຖ້າເປັນຫົວຂໍ້ທີ່ເດັກຄຸ້ນເຄີຍຈະຊ່ວຍໃຫ້ເຂົາເຂົ້າໃຈ ແລະ ຮຽນຮູ້ໄດ້ໄວຂຶ້ນ.

ຄວາມຮູ້ສ່ວນໃຫຍ່ຂອງເຂົາອາດໄດ້ຮຽນຮູ້ຈາກຂ້າງນອກ ເຊັ່ນ ຈາກຄອບຄົວ ແລະ ຊຸມຊົນ. ຂໍ້ມູນຄວາມຮູ້ດັ່ງກ່າວນີ້ ຈະຊ່ວຍເຮົາເຊື່ອມສຳພັນສິ່ງທີ່ເຂົາຮູ້ແລ້ວ ຈາກການດຳເນີນຊີວິດປະຈຳວັນກັບຄວາມຮູ້ໃໝ່ທີ່ພວກເຮົາພະຍາຍາມຈະສອນ. ຍິ່ງໄປກວ່ານັ້ນ, ເດັກບາງຄົນອາດຈະ" ເປັນຊ່ຽວຊານ" ໃນຫົວຂໍ້ໃດໜຶ່ງ ເຊັ່ນ ການຫາປາ ຫລື ການປູກຜັກ ແລະ ສຳລັບເດັກເຫລົ່ານີ້ ເຮົາຄວນໃຫ້ໂອກາດເຂົາ ນຳສະເໜີຄວາມຮູ້ ເພື່ອປະໂຫຍດຂອງເດັກຜູ້ອື່ນໆ ໃນຫ້ອງຮຽນ.

ຖ້າມີການຈັດຕັ້ງດີ, ການເຮັດວຽກເປັນກຸ່ມຈະກະຕຸກຊຸກຍູ້ເດັກເຮັດວຽກ ແລະ ຮຽນຮູ້ຮ່ວມກັນ. ການປະຕິສຳພັນມີຄວາມສຳຄັນເປັນພິເສດ ຫາກວ່າກຸ່ມປະກອບດ້ວຍ ນັກຮຽນທັງຍິງ ແລະ ຊາຍ ຫລື ຫາກວ່າກຸ່ມປະກອບດ້ວຍເດັກທີ່ມີພື້ນຖານ ແລະ ຄວາມສາມາດຫລາກຫລາຍແຕກຕ່າງກັນ.

1.3 ການສ້າງສະພາບແວດລ້ອມການຮຽນຮູ້ ທີ່ມີການຄຸ້ມຄອງທີ່ດີຢູ່ໃນຫ້ອງຮຽນທີ່ມີນັກຮຽນຫລາຍຄົນ

ສະພາບແວດລ້ອມຂອງຫ້ອງຮຽນ

ໃນຄວາມເປັນຈິງແລ້ວ ຍັງມີຄູພວກເຮົາຈຳນວນບໍ່ໜ້ອຍທີ່ບໍ່ໄດ້ກວດເບິ່ງວ່າ ມີນັກຮຽນເທົ່າໃດ ທີ່ຈະຕ້ອງສິດສອນ. ເຖິງຢ່າງໃດກໍຕາມ ພວກເຮົາຈະຕ້ອງກວດກາເລື່ອງສະພາບແວດລ້ອມຂອງຫ້ອງຮຽນທີ່ນັກຮຽນກຳລັງຮຽນຢູ່.ສະພາບແວດລ້ອມຫ້ອງຮຽນມີຜົນສຳຄັນຍິ່ງຕໍ່ນັກຮຽນ ວ່າເຂົາເຈົ້າສາມາດຮຽນໄດ້ດີແນວໃດ? ໃຫ້ທ່ານຫຼັບຕາ ແລະ ຈິນຕະນາການເບິ່ງຕົວທ່ານເອງ ເມື່ອເປັນຄູສອນໃໝ່ ທີ່ໄດ້ຖືກມອບໝາຍ ໃຫ້ສອນໃນຫ້ອງຮຽນທີ່ມີນັກຮຽນ 60 ຄົນ ຫຼືຫຼາຍກວ່ານັ້ນ. ພາຍຫຼັງການຕົກຕະລຶງ ທ່ານອາດຕອບຮັບການ ມອບໝາຍ ອັນນັ້ນ, ມີຄຳຖາມອັນໃດແດ່ ທີ່ທ່ານຈະຖາມຕົວຂອງທ່ານ? ສ່ວນຫຼາຍແລ້ວ ຄຳຖາມ ທຳອິດ ທີ່ເກີດຂຶ້ນຢູ່ ໃນໃຈທ່ານແມ່ນ "ຂ້ອຍຈະຄຸ້ມຄອງນັກຮຽນທັງໝົດໄດ້ແນວໃດ?" ໃນຕົວຈິງແລ້ວ ຄຳຖາມນີ້ໄດ້ສະແດງໃຫ້ເຫັນ ເຖິງເລື່ອງທີ່ສຳຄັນກວ່າໝູ່ໝົດ ຢູ່ໃນການເຮັດວຽກສິດສອນ ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ຊຶ່ງເອີ້ນວ່າ: *ການຄຸ້ມຄອງ*
ສະພາບ ແວດລ້ອມຂອງຫ້ອງຮຽນ ເພື່ອໃຫ້ເປັນບ່ອນສະດວກສະບາຍ ໃນການສິດສອນ ແລະ ຮ່ຳຮຽນ. ສະພາບແວດລ້ອມຂອງຫ້ອງຮຽນ ລວມມີສະພາບແວດລ້ອມທາງດ້ານວັດຖຸ ຊຶ່ງປະກອບມີຊັບ ພະຍາກອນສຳລັບການຮຽນບົດຮຽນ ກໍຄືສະພາບແວດລ້ອມທາງດ້ານຈິດຕະສາດ-ສັງຄົມ,

ຄວາມອາດສາມາດຂອງທ່ານ ໃນການປະດິດສ້າງສະພາບແວດລ້ອມ ທາງດ້ານວັດຖຸ ແລະ ຈິດຕະສາດ - ສັງຄົມ ທີ່ມີການຄຸ້ມຄອງທີ່ດີ ສາມາດເຮັດໃຫ້ ມີຄວາມແຕກຕ່າງລະຫວ່າງ ຫ້ອງຮຽນທີ່ມີດຽງບ ແລະ ຫ້ອງຮຽນທີ່ດຳເນີນໄປໄດ້ດີ ແລະ ຫ້ອງຮຽນ ທີ່ຢູ່ໃນຄວາມຫຍຸ້ງຍາກສັບສົນ.

ຄຳຖາມ

1. ຄຳວ່າ “ການຮຽນຮ່ວມ“ ໝາຍຄວາມວ່າແນວໃດ?
2. ມີວິທີຮຽນຮູ້ໃດແດ່? ເພື່ອຊ່ວຍໃຫ້ເດັກຮຽນຮູ້ໄດ້.
3. ອຸປະສັກໃນການຮຽນຮູ້ຂອງເດັກມີຄືແນວໃດແດ່?
4. ເພື່ອຫຍັງ ຈຶ່ງຕ້ອງມີການຄຸ້ມຄອງແລະສ້າງສະພາບແວດລ້ອມຢູ່ໃນຫ້ອງຮຽນ ?

ບົດທີ 2
ການເຮັດໃຫ້ການຮຽນຮູ້ມີຄວາມຫມາຍສຳລັບທຸກຄົນ

2.1 ການຮຽນຮູ້ເພື່ອຊີວິດ

ການນຳເອົາເດັກທຸກຄົນເຂົ້າໂຮງຮຽນ ແມ່ນ"ການໃຫ້ຄຸນຄ່າຂອງການສຶກສາ".ອີກດ້ານໜຶ່ງ, ຜູ້ປົກຄອງ ແລະ ເດັກອາດຈະບໍ່ເຫັນວ່າຄວາມຮູ້ຂໍ້ມູນທີ່ຮຽນໃນໂຮງຮຽນ ມີຄວາມຫມາຍ ສຳຄັນຄືແນວໃດ ? ຕໍ່ຊີວິດປະຈຳວັນຂອງພວກເຂົາ. ສຳລັບ ຜູ້ປົກຄອງທີ່ເພິ່ງພາລູກຊ່ວຍຫາ ລາຍໄດ້ນັ້ນ, ພວກເຂົາເອງກໍອາດຈະຄິດວ່າ " ຮຽນຮູ້ເພື່ອເຮັດວຽກ " ມີຄວາມ ສຳຄັນກວ່າທີ່ຈະ ໄປໂຮງຮຽນ.

ສະນັ້ນ, ສິ່ງທ້າທາຍຂອງພວກເຮົາ ກໍຄື ຕ້ອງສ້າງສະພາບແວດລ້ອມທີ່ເປັນມິດຕໍ່ການຮຽນຮູ້ ທີ່ກະ ຕຸ້ນເດັກໃຫ້ຮຽນຮູ້ໂດຍເຊື່ອມໂຍງສິ່ງທີ່ກຳລັງຮຽນກັບຄວາມສົນໃຈ ແລະ ຊີວິດປະຈຳວັນ ຂອງເຂົາ. ໃນຂະນະທີ່ທ່ານສອນເດັກ, ໃນຄວາມນຶກຄິດຂອງເດັກ ເຂົາຈະພາຍາຍາມເຊື່ອມໂຍງ ສິ່ງທີ່ກຳລັງຮຽນຢູ່ ໃນປັດຈຸບັນກັບສິ່ງທີ່ພວກເຂົາໄດ້ຮຽນຮູ້ແລ້ວ ຈາກຊີວິດຈິງໃນຫ້ອງຮຽນ, ຄອບ ຄົວ ຫລື ຊຸມຊົນ. ພວກເຮົາຈະສາມາດສ້າງຄວາມເຊື່ອມໂຍງນີ້ໄດ້ແນວໃດ? ພວກເຮົາມາເບິ່ງ ກໍລະນີຕົວຢ່າງດັ່ງຕໍ່ໄປນີ້:

ກິດຈະກຳເພື່ອປະຕິບັດ: ການເຊື່ອມໂຍງການຮຽນຮູ້ໃສ່ກັບຊີວິດໃນຊຸມຊົນ

ການປັບຫລັກສູດແຫ່ງຊາດ ແລະ ລງ່ງຫົວຂໍ້ທີ່ສຳຄັນຂອງມັນ ໂດຍອີງໃສ່ສິ່ງທີ່ເດັກໄດ້ຮຽນ ຮູ້ແລ້ວ ກັບສິ່ງທີ່ທ່ານຄິດວ່າເຂົາຄວນຈະຮູ້ການກ່ຽວໂຍງກັບຊີວິດປະຈຳວັນຂອງເດັກ ເຊັ່ນ : ຫົວຂໍ້ການປູກຝັງ ຫລື ຫາປາ, ຫລືຫົວຂໍ້ທີ່ຈະຊ່ວຍໃຫ້ພວກເຂົາມີຊີວິດຢູ່ລອດ ເຊັ່ນ ຫົວຂໍ້ກ່ຽວກັບ ສຸຂະພາບ. ທ່ານຮູ້ຈັກອາຊີບຂອງຜູ້ປົກຄອງເດັກຫລືບໍ່? ທ່ານຮູ້ຈັກເດັກອາໄສຢູ່ບ່ອນໃດຫລາຍທີ່ ສຸດຫລືບໍ່? ມີເດັກຫລາຍຄົນຂາດໂຮງຮຽນຫລືບໍ່? ພວກເຂົາມັກຂາດໂຮງຮຽນຊ່ວງເວລາໃດ? ທ່ານຮູ້ບໍ່ວ່າຍ້ອນຫຍັງ? ໂຮງຮຽນຂອງ ທ່ານ ມີປະຫວັດການຮຽນຂອງເດັກທີ່ບັນຈຸຂໍ້ມູນເຫລົ່ານີ້ ຫລື ບໍ່?

ໃຫ້ພິຈາລະນາຫົວຂໍ້ຕ່າງໆທີ່ທ່ານຈະສອນໃນພາກຮຽນນີ້ ແລະ ໃຫ້ຕື່ມຊ່ອງວ່າງໃນຕາຕະ ລາງ ຄືດັ່ງສະແດງລຸ່ມນີ້. ລງ່ງບັນດາຫົວຂໍ້, ໃຫ້ເບິ່ງວ່າຫົວຂໍ້ຕ່າງໆພົວພັນກັບຊີວິດປະຈຳວັນຂອງ ເດັກຄືແນວໃດ ? ແລະ ໃຫ້ຄິດເຖິງວິທີທາງ ເພື່ອເຮັດໃຫ້ມັນມີຄວາມຫມາຍ ຫລາຍຂຶ້ນ.

ຫົວຂໍ້	ເຊື່ອມໂຍງກັບຊີວິດ ປະຈຳວັນ ຂອງເດັກ	ວິທີປັບຫົວຂໍ້
ຕົວຢ່າງ:	ຊຸມຊົນທີ່ເດັກອາໄສຢູ່ມີ	ກ່ອນອື່ນໃຫ້ສຶກສາປ່າໄມ້ໃນທ້ອງຖິ່ນໂດຍການສັງເກດ

ຕົ້ນໄມ້ໃນປ່າຕຶບ (Rainforest)	ຕົ້ນໄມ້ຫລວງຫລາຍ ຫລື ມັນຕັ້ງຢູ່ໃກ້ກັບປ່າທີ່ບ ເປັນປ່າຕຶບ	ແລະ ເຮັດກິດຈະກຳພາກປະຕິບັດທີ່ເຊື່ອມໂຍງກັບວິຊາ ວິທະຍາສາດ, ຄະນິດສາດ ແລະ ພາສາ.ຈາກນັ້ນ ເຊື່ອມໂຍງກັບປ່າໃນພາກພື້ນແລະໃນທີ່ສຸດເຊື່ອມໂຍງ ກັບປ່າລະດັບໂລກ ເຊັ່ນປ່າຕຶບທຳມະຊາດທັ່ງຫລາຍ.
ຕົວຢ່າງ ຂອງທ່ານ:		

2.2 ການສ້າງສະພາບແວດລ້ອມການຮຽນຮູ້ທີ່ເປັນເພື່ອນມິດເພື່ອເຮັດໃຫ້ການຮຽນຮູ້ມີຄວາມໝາຍ

ການກະກຽມເພື່ອການຮຽນຮູ້ທີ່ມີຄວາມຫມາຍ

"ການຮຽນຮູ້ທີ່ມີຄວາມຫມາຍ" ມີຄວາມຫມາຍວ່າ ພວກເຮົາເຊື່ອມໂຍງສິ່ງທີ່ຮຽນຮູ້(ຫົວຂໍ້ ຫລື ເນື້ອໃນ) ແລະ ວິທີສິດສອນທີ່ພົວພັນກັບຊີວິດປະຈຳວັນຂອງເດັກ ແລະ ຄອບຄົວ. ຄືດັ່ງທີ່ທຸກຄົນຮູ້, ການສິດສອນແມ່ນກິດຈະກຳທີ່ສະຫລັບສັບຊ້ອນ. ພວກເຮົາຕ້ອງພິຈາລະນາ ຫລາຍຢ່າງເວລາກະກຽມ ເພື່ອການຮຽນຮູ້ທີ່ມີຄວາມຫມາຍ. ເດັກຈະຮຽນກໍຕໍ່ເມື່ອ ພວກເຂົາຖືກ ກະຕຸ້ນຈູງໃຈໃຫ້ຮຽນ. ພວກເຂົາຈະຮຽນເມື່ອໄດ້ຮັບໂອກາດຮຽນຢ່າງມີປະສິດທິຜົນ ແລະ ເມື່ອ ພວກເຂົາຮູ້ສຶກວ່າທັກສະ ທີ່ເຂົາມີຈະນຳ ໄປສູ່ຜົນສຳເລັດ.

ນີ້ຄືບາງຄຳຖາມເພື່ອຖາມຕົວທ່ານເອງໃນການກຽມແຜນການສອນ.

- **ສິ່ງກະຕຸ້ນຈູງໃຈ:** ຫົວຂໍ້ມີຄວາມຫມາຍ ແລະ ພົວພັນກັບຊີວິດຈິງຂອງເດັກຫລືບໍ່? ພວກ ເຂົາສົນໃຈສິ່ງທີ່ຖືກຄາດຫວັງຈະໃຫ້ຮຽນ ຫລືບໍ່?
- **ໂອກາດ:** ໂອກາດເຫມາະສົມກັບລະດັບການພັດທະນາການຂອງເດັກຫລືບໍ່? ຕົວຢ່າງ: ຫົວຂໍ້ຍາກເກີນໄປ ຫລື ງ່າຍເກີນໄປສຳລັບເດັກຫລາຍໆຄົນຫລືບໍ່? ກິດຈະກຳ ຕ່າງໆເຫມາະສົມສຳລັບທັ່ງເດັກຍິງ ແລະ ເດັກຊາຍຫລືບໍ່? ມີຄວາມເຫມາະສົມ ສຳລັບ ເດັກ ທີ່ມີພື້ນ ຖານ ແລະ ຄວາມສາມາດແຕກຕ່າງກັນຫລືບໍ່?
- **ທັກສະ:** ເດັກມີທັກສະເພື່ອບັນລຸລະດັບຄາດຫມາຍຫລືບໍ່
- **ການສະທ້ອນ/ການສ່ອງແສງກັບ:** ຊະນິດຂອງການປະເມີນ ແລະ ການສ່ອງແສງທີ່ໃຫ້ແກ່ ເດັກຖືກອອກແບບ ເພື່ອເພີ່ມທະວີການກະຕຸ້ນຈູງໃຈຢາກສືບຕໍ່ການ ຮຽນຮູ້ຫລືບໍ່?

ກິດຈະກຳເພື່ອປະຕິບັດ: ການເຊື່ອມໂຍງການຮຽນຮູ້ກັບຊີວິດປະຈຳວັນຂອງເດັກ

ພະຍາຍາມຄິດຕື່ມອີກ ເຖິງຫົວຂໍ້ທີ່ທ່ານຈະສອນ. ເພີ່ມຕື່ມໃສ່ຕາຕະລາງຂ້າງເທິງ. ທ່ານສາ ມາດສ້າງສາຍເຊື່ອມໂຍງກັບກິດຈະກຳປະຈຳວັນຂອງເດັກໄດ້ຫລືບໍ່? ຕົວຢ່າງ:

- ວຽກເຮືອນ (ການແຕ່ງກິນ, ການເບິ່ງນ້ອງ ການອະນາໄມ);
- ການລ້ຽງສັດ;
- ການຫາຢູ່ຫາກິນ ໂດຍການລ່າສັດ, ຫາປາ ຫລື ເກັບຜັກເກັບຫຍ້າຕ່າງໆ ຫລື
- ປູກຝັງລ້ຽງສັດ ແລະ ເຮັດວຽກໄຮ່ນາ.

ການສ້າງສະພາບແວດລ້ອມການຮຽນຮູ້ທີ່ມີຄວາມຫມາຍ

ເພື່ອເຮັດໃຫ້ການຮຽນຮູ້ທີ່ມີຄວາມຫມາຍເກີດຂຶ້ນໄດ້ນັ້ນ ຄວນສ້າງຫ້ອງຮຽນ ໃຫ້ເປັນເພື່ອນມິດຕໍ່ການຮຽນຮູ້. ຫ້ອງຮຽນທີ່ເປັນເພື່ອນມິດຕໍ່ການຮຽນຮູ້ ຈະຊຸກຍູ້ສິ່ງເສີມນັກຮຽນຖາມຄຳຖາມເປີດ, ລະບຸ/ກຳນົດບັນຫາ, ເລີ່ມການສົນທະນາ ແລະ ສົນທະນາອະພິປາຍ ທາງອອກຂອງບັນຫາ ກັບຄູ, ເພື່ອນ ໆ ແລະ ຄອບຄົວ. ເດັກທຸກຄົນ - ທັງຊາຍ ແລະ ຍິງ ລວມທັງເດັກທີ່ມາຈາກພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ ຈະຮູ້ສຶກເຊື່ອໝັ້ນ ແລະ ສະບາຍໃຈທີ່ຈະເຂົ້າມີສ່ວນຮ່ວມຢ່າງເຕັມທີ່.

ໃນເມື່ອກ່ອນ, ບົດບາດຂອງຄູພວກເຮົາເປັນພຽງ “ຜູ້ໃຫ້ຂໍ້ມູນຄວາມຮູ້”. ແຕ່ເພື່ອຈະຊ່ວຍເດັກຂອງເຮົາໃຫ້ຮຽນຢ່າງເຕັມຄວາມສາມາດນັ້ນ, ເຮົາຕ້ອງຂະຫຍາຍບົດບາດຂອງເຮົາເປັນຜູ້ໃຫ້ຄວາມສະດວກ, ເປັນຜູ້ຈັດການ, ເປັນຜູ້ສັງເກດການ ແລະ ເປັນທັງຜູ້ຮຽນ. ບົດບາດໃໝ່ເຫລົ່ານີ້ ມີລາຍລະອຽດປະກອບຫຍັງແດ່?

- **ຜູ້ໃຫ້ຄວາມສະດວກ:** ພວກເຮົາຈຳເປັນຕ້ອງສະໜອງໂອກາດການຮຽນຮູ້ທີ່ເຫມາະສົມ ສຳລັບ ເດັກ ແລະ ຊຸຍູ້ສິ່ງເສີມໃຫ້ເຂົາສະເໜີແນວຄິດ ແລະ ເວົ້າກ່ຽວກັບປະເດັນບັນຫາ ໃນທາງທີ່ ສ້າງສັນຢ່າງອິດສະຫລະ.
- **ຜູ້ຈັດການ:** ເພື່ອຈະເປັນຜູ້ໃຫ້ຄວາມສະດວກທີ່ປະສົບຜົນສຳເລັດ, ເຮົາຕ້ອງວາງແຜນ ແລະ ນຳພາການສົນທະນາຢ່າງລະມັດລະວັງ ໂດຍໃຫ້ເດັກແຕ່ລະຄົນມີໂອກາດໄດ້ສະແດງອອກທັດສະນະແນວຄິດຂອງເຂົາ.
- **ຜູ້ສັງເກດການ**: ການສັງເກດເບິ່ງເດັກໃນຂະນະທີ່ພວມເຮັດວຽກເປັນກຸ່ມ, ເປັນຄູ່ ຫລື ເຮັດວຽກຄົນດຽວຕາມລຳພັງຈະຊ່ວຍໃຫ້ເຮົາເຂົ້າໃຈເດັກ ແລະ ວາງແຜນກິດຈະກຳ ການຮຽນຮູ້ທີ່ມີຄວາມຫມາຍໄດ້ດີຂຶ້ນ. ຕົວຢ່າງ: ກິດຈະກຳທີ່ເດັກແຕ່ລະຄູ່ພວມເຮັດວຽກໄດ້ເປັນຢ່າງ ດີສາມາດຂະຫຍາຍເປັນການເຮັດກິດຈະກຳກຸ່ມໄດ້ ຫລືບໍ່? ເດັກທີ່ເປັນຄູ່ກັນສອງຄົນນັ້ນສາ ມາດຈະເປັນຫົວໜ້າກຸ່ມໄດ້ບໍ?
- **ຜູ້ຮຽນຮູ້:** ພວກເຮົາກາຍເປັນຜູ້ຮຽນຮູ້ເມື່ອເຮົາສະທ້ອນພາບຄືນບົດຮຽນຂອງເຮົາ. ພວກເຮົາກໍສາມາດພັດທະນາວິທີທາງທີ່ຈະເຮັດ ໃຫ້ສິ່ງທີ່ຮຽນຮູ້ມີຄວາມຫມາຍຫລາຍຂຶ້ນ. ຕົວຢ່າງ: ກິດຈະກຳອັນໜຶ່ງຈະມີ ຜົນຕໍ່ການຊ່ວຍເຫລືອເດັກໃຫ້ເຂົ້າໃຈຫົວຂໍ້ ຫລື

ແນວຄວາມຄິດທີ່ຍາກໄດ້ບໍ? ກິດຈະກຳນີ້ສາມາດນຳໃຊ້ໃນຫົວຂໍ້ ຫລື ແນວຄວາມຄິດອື່ນໆໄດ້ບໍ?

2.3 ການສ້າງປະສົບການການຮຽນຮູ້ທີ່ຄຳນຶງເຖິງບົດບາດຍິງຊາຍ

ໃນຊຸດເຄື່ອງມືນີ້ວ່າ "ບົດບາດຍິງຊາຍ" ຫມາຍເຖິງບົດບາດ ທາງສັງຄົມທີ່ຜູ້ຊາຍ ແລະ ຜູ້ຍິງ ໄດ້ຮັບມອບຫມາຍພາຍໃນວັດທະນະທຳໃດໜຶ່ງ ເຊັ່ນ "ຜູ້ຊາຍ ເປັນຜູ້ທຳມາຫາກິນລ້ຽງຄອບຄົວ" ແລະ "ຜູ້ຍິງ ເປັນຜູ້ໃຫ້ການດູແລລູກເຕົ້າ". ບົດບາດຍິງຊາຍ ຖືກສ້າງຂຶ້ນໂດຍສັງຄົມ ແລະ ຖືກ ສອນໃຫ້ຄົນຈາກລຸ້ນໜຶ່ງສູ່ລຸ້ນຕໍ່ໄປ ເຊິ່ງເປັນວັດທະນະທຳສ່ວນໜຶ່ງຂອງສັງຄົມ. ບົດບາດຍິງຊາຍ ປ່ຽນແປງໄປຕາມກາລະເວລາ ເຊັ່ນດຽວກັບຮີດຄອງປະເພນີ ແລະ ຄວາມຮັບຮູ້ທາງວັດທະນະ ທຳອື່ນໆ.

ໜ້າເສຍດາຍທີ່ບົດບາດເຫລົ່ານີ້ສາມາດຈະໃຫ້ໂທດການຮຽນຮູ້ຂອງເດັກເລື້ອຍໆ ເພາະວ່າ ມັນຈຳກັດວິທີປະພຶດປະຕິບັດຂອງເດັກຍິງ ແລະ ເດັກຊາຍ ແລະ ຈຳກັດສິ່ງທີ່ຈະອະນຸຍາດ ໃຫ້ ຮຽນໄດ້. ກໍ ລະນີສຶກສາລຸ່ມນີ້ ເປັນຕົວຢ່າງ ວ່າສິ່ງດັ່ງກ່າວເກີດຂຶ້ນໄດ້ຢ່າງໃດ.

ເລື່ອງກ່ຽວກັບນ້ອງສອນ

ສອນອາໄສຢູ່ບ້ານທີ່ໃກ້ກັບຕົວເມືອງປາກເຊ ພາກໃຕ້ຂອງ ສປປ ລາວ. ສອນມີອາຍຸເກົ້າ ປີຮຽນ ຫ້ອງ ປ.3. ລາວມ່ວນຊື່ນກັບການຍ່າງໄປໂຮງຮຽນກັບອ້າຍອີກ 2 ຄົນ ຊື່ ລີ ແລະ ຮົ່ງ. ສອນເປັນເດັກ ຮຽນດີ ແລະ ເປັນຄົນດຸໝັ່ນພາກພຽນ ແຕ່ລາວໄດ້ຮຽນດ້ວຍຄວາມລຳບາກ. ຄວາມຍາກລຳບາກຂອງສອນ ມີສາເຫດມາຈາກວຽກງານທີ່ລາວຕ້ອງເຮັດຢູ່ເຮືອນກ່ອນມາໂຮງ ຮຽນ. ລາວຕ້ອງເຮັດວຽກຫລາຍຢ່າງ. ເອື້ອຍຂອງສອນຢຽບກັບລະເບີດ ໃນຂະນະທີ່ແລ່ນຫລິ້ນ ແລະ ຕ້ອງເສຍຂາໄປໜຶ່ງຂ້າງ. ລາວມັກຈະປຸກສອນໃຫ້ລຸກມາຊ່ວຍໃນເວລາທີ່ລາວຍັງເຈັບຢູ່. ທຸກເຊົ້າສອນຕ້ອງຕື່ນນອນກ່ອນຜູ້ອື່ນໆ ໃນຄອບຄົວເພື່ອໄປເອົາຟືນມາດັງໄຟ. ໜຶ້ງເຂົ້າໃນຕອນ ເຊົ້າ. ຫລັງຈາກນັ້ນ ລາວຈຶ່ງໄປອາບນ້ຳ ແລະ ປ້ອນເຂົ້ານ້ອງສາວນ້ອຍ. ເມື່ອມາເຖິງໂຮງຮຽນ ສອນຮູ້ສຶກເມື່ອຍ. ອ້າຍຂອງລາວບໍ່ເຄີຍ ຖາມຊ່ວຍເຮັດວຽກເຮືອນເລີຍ. ພວກເຂົາມີແຕ່ໄປຕຶກ ເບັດກັບພໍ່ໃນວັນເສົາ-ອາທິດ, ເຂົາມີເວລາເຮັດວຽກບ້ານທີ່ຄູໃຫ້ ມາ.

ເມື່ອສອນໄປໂຮງຮຽນ ລາວເມື່ອຍຈົນບໍ່ມີສະມາທິຈະຮຽນ. ຢ່າງໃດກໍຕາມ ລາວຮູ້ສຶກລຳ ບາກ ທີ່ຈະເອົາໃຈໃສ່ຕະຫລອດເວລາ ຍ້ອນຄວາມເມື່ອຍລ້າ ແລະ ຫົວຂໍ້ທີ່ລາວຮຽນກໍແຕກຕ່າງ ຈາກຊີວິດປະຈຳວັນຂອງຕົນ. ຄູມັກຈະຮ້າຍລາວເລື້ອຍໆ ໂດຍສະເພາະມີວັນໜຶ່ງທີ່ລາວເຊື່ອບ ຫລັບໃນຫ້ອງ.

ພາຍຫລັງທີ່ຖືກຄູຮ້າຍ, ສອນຕັດສິນໃຈຂາດໂຮງຮຽນ. ລາວຄິດວ່າມັນອາດເປັນການດີກວ່າທີ່ຕ້ອງຢູ່ເຮືອນເພື່ອທີ່ຈະໄດ້ຕັກນ້ຳ, ຫາຟືນ, ດູແລນ້ອງ ແລະ ຮຽນຮູ້ການລ້ຽງສັດ. ສອນເລີ່ມຂາດໂຮງຮຽນ ນັບມື້ນັບຫລາຍ ແລະ ໃນທີ່ສຸດກໍຕັດສິນໃຈອອກໂຮງຮຽນ. ລາວຢູ່ເຮືອນ ແລະ ຊ່ອຍວຽກແມ່ທຸກວັນ. ລາວຮຽນບໍ່ຈົບຫ້ອງ ປ.3. ອ້າຍຂອງລາວ ທັງລີ ແລະ ຮົ່ງຮຽນຈົບປະຖົມ. ພວກເຂົາສາມາດອ່ານ ແລະ ຂຽນ ແລະ ພວມຈະໄປຮຽນຕໍ່ຢູ່ຊັ້ນມັດທະຍົມ.

ສອນ ເປັນພຽງຕົວຢ່າງດຽວທີ່ຊີ້ໃຫ້ເຫັນບົດບາດ ແລະ ໜ້າທີ່ຍິງຊາຍສາມາດນຳໄປສູ່ຄວາມດ້ອຍຢູ່ປາຍແຖວ ແລະ ປະລະໃນໝູ່ເດັກຍິງ. ບົດບາດຍິງຊາຍຍັງສາມາດກະທົບຕໍ່ການຮຽນຮູ້ຂອງເດັກຊາຍ ເພາະເຂົາຈະຮູ້ສຶກວ່າມັນບໍ່ມີຄວາມຫມາຍສຳຄັນພໍເທົ່າໃດ ແລະ ສິ່ງທີ່ສຳຄັນກວ່າ ສຳລັບ ເຂົາແມ່ນການຊ່ອຍຄອບຄົວຫາຢູ່ຫາກິນ. ຍິ່ງໄປກວ່ານີ້, ເດັກຍິງ ແລະ ເດັກຊາຍ ຈະຮຽນຮູ້ຈາກສັງຄົມເຖິງແນວຄວາມຄິດກ່ຽວກັບຕົວເອງ ແລະ ສິ່ງທີ່ເຂົາສາມາດເຮັດໄດ້. ຕົວຢ່າງ: ທ່ານອາດໄດ້ຍິນ ”ເດັກຜູ້ຊາຍບໍ່ຮ້ອງໄຫ້” ຫລື “ເດັກຜູ້ຍິງບໍ່ຄວນຫລິ້ນເກມໜັກໆ” ອີກເຊັ່ນດຽວກັນ, ເດັກຍິງບາງຄົນອາດຮູ້ສຶກບໍ່ໝັ້ນໃຈ ໃນວິຊາຄະນິດສາດ ຫລື ວິທະຍາສາດ ຍ້ອນເຂົາໄດ້ຍິນ ຄົນບອກວ່າ ວິຊາພວກນີ້ເປັນ “ວິຊາຂອງເດັກຜູ້ຊາຍ”. ກົງກັນຂ້າມເດັກທຸກຄົນສາມາດ ບັນລຸຜົນສຳເລັດໄດ້ຖ້າໄດ້ ຮັບ ໂອກາດທີ່ຖືກຕ້ອງເຫມາະສົມ.

ກິດຈະກຳເພື່ອປະຕິບັດ: ການຍົກຄວາມຮັບຮູ້ກ່ຽວກັບບົດບາດຍິງຊາຍ

ມີກິດຈະກຳຫ້ອງຮຽນ 2 ຢ່າງ ທີ່ສາມາດເຮັດເພື່ອຍົກຄວາມຮັບຮູ້ກ່ຽວກັບ ບົດບາດຍິງຊາຍ.

1. ສົນທະນາອະພິປາຍກັບເດັກເປັນກຸ່ມ (ເດັກຍິງຢູ່ນຳກັນ, ເດັກຊາຍຢູ່ນຳກັນ ແລະ ກຸ່ມປະສົມ) ສິ່ງທີ່ເຂົາຄິດເປັນສິ່ງທີ່ເຂົາຄາດຫວັງເພາະເຂົາເກີດເປັນຍິງ ຫລື ເປັນຊາຍ. ເດັກຊາຍ ແລະ ເດັກຍິງຄິດເຖິງບົດບາດ ຫລື ຄາດຫວັງບົດບາດຂອງເພດກົງກັນຂ້າມຢ່າງໃດ? ພວກເຂົາເຫັນຄວາມປ່ຽນແປງໃນບົດບາດເຫລົ່ານີ້ຫລືບໍ່?

2. ບອກໃຫ້ເດັກຊາຍ ແລະ ເດັກຍິງລະບຸ/ກຳນົດຈຸດພິເສດຂອງເດັກຊາຍ ແລະ ເດັກຍິງ. ເຮັດເປັນ 2 ແຖວ. ໃນແຖວທີ 1, ໃຫ້ລຸງສິ່ງທີ່ຄິດວ່າຈຸດພິເສດຂອງຜູ້ຍິງມີຫຍັງແດ່. ຢູ່ແຖວທີ 2, ໃຫ້ລຸງ ສິ່ງທີ່ຄິດວ່າເປັນຈຸດພິເສດຂອງຜູ້ຊາຍ. ເມື່ອສຳເລັດແລ້ວ ໃຫ້ປ່ຽນຄຳວ່າ “ຜູ້ຍິງ” ໄປໃຫ້ແຖວ ທີ່ຄົ້ນຄວ້າຈຸດພິເສດຂອງຜູ້ຊາຍ ແລະ ປ່ຽນຄຳວ່າ “ຜູ້ຊາຍ” ໄປໃຫ້ແຖວທີ່ຄົ້ນຄວ້າ ຈຸດພິເສດຂອງຜູ້ຍິງ. ໃຫ້ນັກຮຽນຄົ້ນຄິດບົດບາດເຫລົ່ານີ້ ອາດສາມາດນຳໃຊ້ ກັບເພດກົງກັນຂ້າມໄດ້ຫລືບໍ່? ໄດ້ທັງຫມົດ ຫລື ພຽງບາງບົດບາດເທົ່ານັ້ນ? ຍ້ອນຫຍັງ? ຄາດວ່າ ເດັກຈະມາເຖິງບົດ ສະຫລຸບ ທີ່ວ່າ ບົດບາດຂອງຍິງ ແລະ ຊາຍທັງຫມົດອາດສາມາດປ່ຽນແປງໄດ້ ຍົກເວັ້ນບົດບາດທີ່ກ່ຽວຂ້ອງກັບຊີວະພາກສົດໆ ເທົ່ານັ້ນ.

ກິດຈະກຳສະທ້ອນພາບ: ການຮັບຮູ້ບົດບາດຍິງຊາຍໃນການຮຽນການສອນ

ໃຫ້ພິຈາລະນາບາງປະໂຫຍກຄຳເວົ້າດັ່ງຕໍ່ໄປນີ້. ໃຫ້ຕື່ມໃສ່ຕາຕະລາງ ແລະ ເຮັດໃຫ້ອອກມາວ່າປະຕິບັດການໃດແດ່ ທີ່ອາດມີຄວາມຈຳເປັນຕ້ອງປັບປຸງສະຖານະການ ໃນຫ້ອງຮຽນຂອງທ່ານ.

ປະໂຫຍກຄຳເວົ້າ	ເລື້ອຍໆ	ບາງຄັ້ງ	ບໍ່ເຄີຍມີ	ປະຕິບັດການທີ່ຈຳເປັນຕ້ອງເຮັດ
ຂ້ອຍກວດສອບອຸປະກອນການຮຽນການສອນ ເພື່ອເບິ່ງວ່າມັນມີຕົວແບບຂອງບົດບາດທີ່ດີສຳລັບເດັກຍິງ ແລະ ເດັກຊາຍ				
ຂ້ອຍຊຸກຍູ້ສິ່ງເສີມເດັກຍິງໃຫ້ໄດ້ຮັບຜົນສຳເລັດທີ່ດີໃນການຮຽນຄະນິດສາດ ແລະວິທະຍາສາດ.				
ຂ້ອຍໃຊ້ວິທີການຮຽນຮູ້ແບບຮ່ວມມື; ບໍ່ມີຄວາມຈຳເປັນຕອ້ງມີລະບຽບວິໄນເຄັ່ງຄັດ.				
ເດັກຍິງຫ້ອງໃຫຍ່ທີ່ຮຽນເກັ່ງຊ່ອຍເດັກຍິງຫ້ອງນ້ອຍກວ່າຮຽນຄະນິດສາດ ແລະ ວິທະຍາສາດ				
ຂ້ອຍໃຫ້ໂອກາດເດັກທຸກຄົນໃນຫ້ອງເພື່ອໃຫ້ພວກເຂົາໄດ້ສະແດງອອກ ແລະ ໄດ້ຮັບຜົນສຳເລັດໃນວິຊາຫລັກ.				

ເພື່ອຊ່ອຍເດັກຍິງໃຫ້ຮູ້ສຶກສະບາຍຂຶ້ນໃນໂຮງຮຽນ ແລະ ເພື່ອຮັບປະກັນໂອກາດທີ່ເທົ່າທຽມ, ໃຫ້ທ່ານເຮັດວຽກກັບເພື່ອນ ແລະ ຜູ້ບໍລິຫານຂອງທ່ານໃນໂຮງຮຽນ ເພື່ອດຳເນີນການປະຕິບັດດັ່ງຕໍ່ໄປນີ້ :

- ສະໜັບສະໜູນການທົບທວນປັບປຸງຄືນອຸປະກອນການຮຽນການສອນ ແລະ ລຶບລ້າງຄວາມລຳອຽງທາງເພດ ແລະ ອື່ນໆ ເຊັ່ນ ການຂາດການລວມເອົາເດັກພິການ ຫລື ເດັກຊົນເຜົ່າເຂົ້າ ໃນປຶ້ມແບບຮຽນນີ້ ແມ່ນໜ້າທີ່ຂອງທັງຫມົດໂຮງຮຽນ ທີ່ຕ້ອງດຳເນີນການ, ແຕ່ວ່າ ຄູແຕ່ລະຄົນຈຳເປັນຕ້ອງຮັບຮູ້ ແລະ ຮູ້ວິທີທີ່ຈະດຳເນີການຄືແນວໃດ ?
- ນຳໃຊ້ຫລັກສູດທີ່ຢືດຢຸ່ນ ແລະ ສື່ການຮຽນການສອນສ່ວນຕົວໂດຍກົງ ເພາະວ່າ ເດັກຍິງ ອາດຈະມີຄວາມຕ້ອງການໃຊ້ເວລາຂອງເຂົາເອງ ເຊັ່ນ ວຽກເຮືອນການຊານ ແລະ ເບິ່ງແຍງນ້ອງ. ເດັກທັງຊາຍ ແລະ ຍິງຈາກຄອບຄົວທຸກຍາກ ມັກຈະມີເວລາໜ້ອຍ ເພື່ອເຮັດວຽກບ້ານ ເພາະຄອບຄົວຕ້ອງການຄວາມຊ່ອຍເຫລືອ ຈາກທຸກຄົນ

ເພື່ອດຳລົງຊີບ. ໃຫ້ພະຍາຍາມເຮັດກິດຈະກຳການຮຽນຮູ້ຕ່າງໆ ໃນເວລາຢູ່ໂຮງຮຽນ ແລະ ອະນຸຍາດ ໃຫ້ມີທາງເລືອກ ເມື່ອມີການໃຫ້ວຽກບ້ານ.

- ໂດຍປົກກະຕິຄູ ຈະເວົ້າກັບເດັກຊາຍຫລາຍກວ່າເດັກຍິງ ໃນຫລາຍໆຫ້ອງຮຽນປະຖົມ. ທ່ານສາມາດທົດລອງໃຊ້ກິດຈະກຳແບບມີສ່ວນຮ່ວມກັບເດັກ ເພື່ອປະເມີນວ່າ ທ່ານ ປະຕິບັດຕໍ່ເດັກຊາຍ ແລະ ເດັກຍິງແຕກຕ່າງກັນຫລືບໍ່. ຕົວຢ່າງ : ບອກໃຫ້ເດັກເກັບກ້ອນຫີນ ມາຜູ້ລະ 5 ກ້ອນ (ທ່ານ ອາດມີໄວ້ກ່ອນແລ້ວເພື່ອໃຊ້ ໃນການສອນວິຊາຄະນິດສາດ). ບອກໃຫ້ເດັກແຕ່ລະຄົນ ວາງກ້ອນຫີນໃສ່ຂ້າງໂຕະ ເທື່ອລະກ້ອນທຸກຄັ້ງ ທີ່ທ່ານເວົ້ານຳ, ຖາມ, ຄຳ ຖາມ ຫລື ອະນຸຍາດໃຫ້ຕອບຄຳຖາມ. ພ້ອມດຽວກັນ ທ່ານຍັງສາມາດປະເມີນ ແບບແຜນການປະຕິສຳພັນ ແລະ ສົນທະນາບັນຫາວ່າ ສິ່ງນີ້ອາດເກີດຂຶ້ນໄດ້. ຍຸດທະສາດອື່ນໆ ທີ່ທ່ານສາມາດ ໃຊ້ເພື່ອປະຕິບັດກັບນັກຮຽນຢ່າງເທົ່າທຽມ ກັນມີຫຍັງແດ່ ? ມີທັກສະໃດແດ່ ທີ່ເດັກຕ້ອງການຢາກຮຽນຮູ້ ເພື່ອວ່າເຂົາຈະສາມາດເຂົ້າມາມີສ່ວນຮ່ວມ ຢ່າງເທົ່າທຽມ ?

ຫລາຍໆກິດຈະກຳຂ້າງເທິງຈະຕ້ອງການການສະໜັບສະໜູນຂອງຜູ້ປົກຄອງ ຫລື ຜູ້ດູແລ ອື່ນໆ. ດ້ວຍເຫດຜົນດັ່ງກ່າວ, ປະເດັນບັນຫາເຫລົ່ານີ້ຄວນໄດ້ຮັບການພິຈາລະນາ ໃນກອງປະຊຸມ ຄະນະກຳມະການໂຮງຮຽນ ແລະ ແຜນປະຕິບັດການກໍຄວນພັດທະນາຂຶ້ນມາ. ມັນຈະຊ່ວຍຄູທຸກຄົນ ຖ້າຫາກນະໂຍບາຍໂຮງຮຽນ ກ່ຽວກັບເລື່ອງເຊັ່ນນີ້ເປັນລະບຽບການ ແລະ ການລຳອຽງທາງເພດໄດ້ ຮັບການອະພິປາຍ ແລະ ຕົກລົງກັນໄດ້ ໂດຍຄູ ແລະ ຜູ້ປົກຄອງທັງຫມົດ.

2.4 ການຮຽນຮູ້ແບບຕັ້ງໜ້າ ແລະ ແບບມີສ່ວນຮ່ວມ

ຢູ່ພາຍໃນ ແລະ ພາຍນອກຂອງຫ້ອງຮຽນ, ພວກນັກຮຽນເຂົາຄວນຫ້າວຫັນ/ຕັ້ງໜ້າຮຽນຮູ້ ເພື່ອຈະນຳສິ່ງທີ່ໄດ້ຮຽນໄປປະຕິບັດ ແລະ ເປັນການເພີ່ມຄວາມສາມາດນຳອີກ. ພວກເຮົາຍັງ ຕ້ອງຖືກຊຸກຍູ້ສົ່ງ ເສີມໃຫ້ເຮັດວຽກກັບເດັກທຸກຄົນໃນຫ້ອງຮຽນ, ເຖິງວ່າຈະເປັນເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ. ການຮ່ວມມືຈະກະຕຸກຊຸກຍູ້ ໃຫ້ເກີດຄວາມເຂົ້າໃຈ ແລະ ຍອມຮັບກັນໄດ້. ການເຮັດວຽກເປັນຄູ່ ແລະ ເປັນກຸ່ມນ້ອຍ ຈະເຮັດໃຫ້ເກີດການມີສ່ວນ ຮ່ວມ ແລະ ການປະຕິສຳພັນລະຫວ່າງເດັກດີຂຶ້ນ ແລະ ຊ່ວຍສ້າງຄວາມເປັນຕົວຂອງຕົວເອງ ລວມທັງຄວາມສາມາດ ໃນການເຮັດວຽກກັບຜູ້ອື່ນໄດ້ຢ່າງສ້າງສັນນຳດ້ວຍ. ບາງຕົວຢ່າງຂອງ ໂອກາດການຮຽນຮູ້ທີ່ດີ ຈະປະກອບດ້ວຍການລົງທັດສະນະສຶກສາພາກສະໜາມ ແລະ ການຫລິ້ນ ເກມເພື່ອການຮຽນຮູ້ດ້ວຍ.

ກິດຈະກຳເພື່ອປະຕິບັດ: ການໄປທັດສະນະສຶກສາພາກສະໜາມ

ການນຳພາເດັກໄປທັດສະນະສຶກສາພາກສະໜາມເຊັ່ນ : ໄປທີ່ສວນຄົວໂຮງຮຽນ,ໄປທີ່ ນ້ຳສ້າງ, ຝາຍກັ້ນນ້ຳຂອງຊຸມຊົນ, ໄປຍັງສູນຊຸມຊົນ. ພວກເຂົາສາມາດສັງເກດສິ່ງທີ່ມີຊີວິດ ຫລື ປະກົດການທຳມະຊາດ ລວມທັງຮຽນຮູ້ຈາກຜູ້ຊ່ຽວຊານ.

ການທັດສະນະສຶກສາເພື່ອສະໜັບສະໜຸນການເຮັດວຽກກຸ່ມ

ຕົວຢ່າງ: ການໄປທັດສະນະສຶກສາທີ່ຝາຍກັ້ນນ້ຳຂອງຊຸມຊົນ, ແຕ່ລະກຸ່ມທີ່ຮຽນຢູ່ຫ້ອງ ປ5 ພວກເຮົາ ຕ້ອງແບ່ງວຽກໃຫ້ແຕ່ລະກຸ່ມຂອງເດັກເພື່ອປະຕິບັດ. ກ່ອນທີ່ຈະໄປເບິ່ງຝາຍກັ້ນນ້ຳ ສະມາຊິກກຸ່ມສາມາດຮຽນຮູ້ ກ່ຽວກັບຄວາມສຳຄັນຂອງນ້ຳຕໍ່ຊີວິດຄົນເຮົາ ແລະການກະສິກຳ. ທີ່ຝາຍກັ້ນນ້ຳ, ແຕ່ລະກຸ່ມອາດຖືກຮ້ອງຂໍໃຫ້: ປະເມີນຄວາມກວ້າງຂອງຝາຍ; ຊຸງນແຜນທີ່ ພື້ນທີ່ ທີ່ໄດ້ຮັບຜົນກະທົບທັນທີທັນໃດຈາກຝາຍ; ແຕ້ມຮູບຕົ້ນໄມ້ຊະນິດຕ່າງໆ ທີ່ຢູ່ອ້ອມ ຝາຍ; ຫລື ຕັ້ງຄຳຖາມໃນເວລາທີ່ຮັບ ຟັງການໃຫ້ຂໍ້ມູນຄວາມຮູ້ໂດຍວິສະວະກອນປະຈຳຝາຍ.

ເມື່ອກັບຄືນມາຫ້ອງຮຽນແຕ່ລະກຸ່ມ ສາມາດໃຊ້ຂໍ້ມູນຄວາມຮູ້ທີ່ໄດ້ລວບລວມໄວ້ນຳສະ ເໜີ ຫລື ລາຍງານຜົນການສັງເກດຂອງເຂົາ. ພວກເຂົາຍັງສາມາດສົນທະນາອະທິບາຍຄວາມ ສຳຄັນຂອງຝາກັ້ນນ້ຳກັບຄອບຄົວຂອງເຂົານຳອີກ.

ການປະຕິບັດການທີ່ທ່ານ ສາມາດເຮັດລ່ວງໜ້າປະກອບດ້ວຍ: ການດຳເນີນ ການເຮັດ ວິໄຈ ເພື່ອກຽມການ, ສົນທະນາອະພິປາຍຫມິດຫ້ອງ ຫລື ສອບຖາມ ກ່ຽວກັບ ສິ່ງທີ່ເດັກອາດ ຈະເຫັນ ໃນລະຫວ່າງລົງສະໜາມ;

- ຮັບເອົາການຊ່ອຍເຫລືອຂອງຈາກຄົນທີ່ຈະຊ່ອຍ ຫລື ຈາກສະມາຊິກຄອບຄົວ ເພື່ອ ຈັດຕັ້ງການທັດສະນະ ແລະ ມີສ່ວນຮ່ວມໃນນັ້ນ;
- ຊອກຫາໂອກາດເພື່ອຮັບຟັງ ແລະ ສຳພາດຜູ້ຊ່ຽວຊານ
- ມອບຫມາຍກິດຈະກຳສະເພາະໃຫ້ກຸ່ມ, ຄູ່ ຫລື ເດັກນັກຮຽນເປັນລາຍບຸກຄົນ ທີ່ຈະ ຊ່ອຍ ພວກເຂົາໃຫ້ເຂົ້າໃຈສິ່ງທີ່ຈະໄດ້ພົບເຫັນໃນລະຫວ່າງລົງສະໜາມ.

ການທັດສະນະສຶກສາ ເຮັດໃຫ້ເກີດການຮຽນຮູ້ທີ່ມີຄວາມຫມາຍ. ມັນຍັງເປັນຕົວຢ່າງ ຂອງການຮຽນຮູ້ແບບປະສົມປະສານເຊິ່ງ ຕົວຢ່າງ ການວິໄຈກ່ຽວກັບຝາຍກັ້ນນ້ຳ ກ່ຽວໂຍງກັບ ວິຊາຄະນິດສາດ, ວິທະຍາສາດ, ພາສາ ແລະ ສັງຄົມສາດ.


ວົງຈອນແຫ່ງການຮຽນຮູ້

ທ່ານຈະປະຕິບັດດ້ວຍຕົວເອງ ເພື່ອທີ່ຈະວາງແຜນການສອນຂອງທ່ານ. ມັນຍັງເປັນສິ່ງທີ່ທ່ານ ສາມາດ ເຮັດຮ່ວມກັບນັກຮຽນຂອງທ່ານ!

ໃຫ້ລະບຸ/ກຳນົດບັນດາໂອກາດຕ່າງໆທັງຫມົດສຳລັບການລົງພາກສະໜາມພາຍໃນໄລຍະ ທາງ ທີ່ບໍ່ຫ່າງໄກຈາກຫ້ອງຮຽນຂອງທ່ານ. ຢູ່ທີ່ກາງແຜ່ນເຈ້ຍ, ໃຫ້ແຕ້ມຮູບວົງກົມ ຫລື ຮູບໄຂ່ ເພື່ອເປັນຕົວແທນຫ້ອງຮຽນຂອງທ່ານ. ອ້ອມຮອບວົງກົມນີ້ໃຫ້ແຕ້ມອີກວົງກົມໜຶ່ງ ທີ່ເປັນຕົວແທນ ໂຮງຮຽນຂອງທ່ານ. ອ້ອມຮອບວົງກົມໂຮງຮຽນ, ໃຫ້ແຕ້ມຮູບວົງກົມໃຫຍ່ ເພື່ອເປັນຕົວແທນຊຸມ

ຊົນ ຫລື ເຂດ ຫລື ເມືອງ ຂອງທ່ານ. ເລີ່ມຈາກວົງກົມໂຮງຮຽນ. ໂຮງຮຽນມີຟາມລ້ຽງສັດ ຫລື ສັດ ຊະນິດຕ່າງໆທີ່ລ້ຽງຮັກສາໄວ້ບໍ? ມີຕົ້ນໄມ້ຫລືທົ່ງນາບໍ່? ມີຮົ້ງນົກຫລືຮັ້ງມົດບໍ່?

ພາຍໃນວົງກົມໂຮງຮຽນ,ໃຫ້ຂຽນລຳດັບຊື່ຂອງສະຖານທີ່ຕ່າງໆ ໃນການຮຽນຮູ້ທຸກຢ່າງພາຍ ນອກຫ້ອງຮຽນ. ທ່ານສາມາດສ້າງສະພາບແວດລ້ອມການຮຽນຮູ້ອັນໃໝ່ ສຳລັບເດັກ ຫລືບໍ່ ເຊັ່ນ ສວນຄົວ ໂຮງຮຽນ?



ຕໍ່ໄປ, ໃຫ້ເຄື່ອນໄປຍັງວົງກົມຊຸມຊົນ, ເຂດ/ເມືອງ. ໃຫ້ພິຈາລະນາຫ້າງຮ້ານ ແລະ ທຸລະກິດທີ່ໜ້າ ສົນໃຈສຳລັບເດັກທີ່ຈະຮຽນຮູ້. ມີຊາວນາທີ່ປູກພືດຜົນພິເສດ ເຊັ່ນ ຕົ້ນໝາກກ້ຽງ ຫລື ສັດພິເສດຕ່າງໆ ຫລືບໍ່? ມີຫໍພິພິດທະພັນ, ປ່າໄມ້, ສວນສາທາລະນະ ຫລື ທົ່ງນາບໍ່? ໃຫ້ຂຽນຊື່ ຂອງໂອກາດຕ່າງໆ ສຳລັບການຮຽນຮູ້ເຫລົ່ານີ້ໃສ່ວົງກົມ.

ການນຳໃຊ້ພື້ນທີ່ໂຮງຮຽນຂອງ ທ່ານ ເພື່ອຊ່ວຍນັກຮຽນໃນຫ້ອງຮຽນຮູ້ ກ່ຽວກັບການປະພຶດ ທີ່ເໝາະສົມຢູ່ພາຍນອກຫ້ອງຮຽນ ແລະ ຮຽນຮູ້ວິທີເຮັດວຽກຮ່ວມກັນເປັນກຸ່ມ. ຢ່າລືມເດັກທີ່ມີ ບັນຫາໃນການຍ່າງ ຫລື ມີຄວາມເປັນພິການໃດໜຶ່ງ. ພວກເຂົາຈະສາມາດເຂົ້າເຖິງໂອກາດ ຕ່າງໆ ໃນການຮຽນຮູ້ເຫລົ່ານີ້ໄດ້ຢ່າງໃດ? ທ່ານອາດຈຳເປັນຕ້ອງສຶກສາເສັ້ນທາງກ່ອນ. ທ່ານຍັງ ອາດຈຳເປັນຕ້ອງ ການຄວາມຊ່ວຍເຫລືອ ຈາກຜູ້ປົກຄອງ ຫລື ຈາກນັກຮຽນຄົນອື່ນໆອີກດ້ວຍ.

ກິດຈະກຳເພື່ອປະຕິບັດ: ເກມຕ່າງໆເພື່ອການຮຽນຮູ້

ເດັກສ່ວນຫລາຍຈະມັກການຫລິ້ນເກມ, ພວກເຂົາຈະສ້າງກະຕິກາຂອງການຫລິ້ນເກມໃໝ່. ພວກເຂົາອາດໃຊ້ຫມາກບານ, ຝາປິດແກ້ວ, ເຊືອກ, ໃບໄມ້ ຫລື ວັດສະດຸອື່ນໆ. ເກມການຫລິ້ນບົດບາດ ສົມມຸດ, ການແກ້ບັນຫາ ຫລື ການໃຊ້ທັກສະສະເພາະ ແລະ ຂໍ້ມູນ ຄວາມຮູ້ເປັນວິທີທາງທີ່ດີ ເພື່ອເຮັດໃຫ້ເດັກມີຄວາມສົນໃຈ ໃນສິ່ງທີ່ພວກເຂົາພວມຮຽນຢູ່.

ການຮຽນຮູ້ແບບຕັ້ງໜ້າສາມາດນຳໃຊ້ເກມຕ່າງໆ ທີ່ສາມາດປັບປຸງທັກສະການສື່ສານຂອງ ເດັກ ກໍຄື ທັກສະໃນການວິເຄາະ ແລະ ການຕັດສິນໃຈ. ຕົວຢ່າງ: ໂດມິໂນ, ບິງໂກ ແລະ ເກມ 5 ຄຳຖາມ (ປັນເກມທີ່ເດັກພະຍາຍາມເດົາສິ່ງຂອງວ່າແມ່ນຫຍັງ ດ້ວຍການຖາມໄດ້ພຽງ 5 ຄຳ

ຖາມ). ທ່ານ ແລະ ນັກຮຽນຂອງທ່ານສາມາດອອກແບບອຸປະກອນສຳລັບຫລາຍໆເກມ ແລະ ທ່ານສາມາດປັບເກມອັນ ດຽວກັນນັ້ນເພື່ອໃຊ້ໃນຈຸດປະສົງທີ່ແຕກຕ່າງກັນ ແລະ ຕ່າງຂັ້ນຮຽນ.

ເກມ ແລະ ອຸປະກອນປະກອບຫລິ້ນເຫລົ່ານີ້ສາມາດປ່ຽນແປງໄດ້ ເພື່ອທີ່ຈະໃຫ້ເຊື່ອມໂຍງ ໂດຍກົງກັບຫລັກສູດ. ທ່ານສາມາດສ້າງບັດໂດມີໂນ ດ້ວຍຮູບຊົງເລຂາຄະນິດທີ່ສາມາດຈັບຄູ່ຕໍ່ ເຂົ້າກັນໄດ້.
ຕົວຢ່າງ: ຮູບຈະຕຸລັດຢູ່ບົນບັດໂດມີໂນ ບັດໜຶ່ງສາມາດຈັບຄູ່ກັບໂດມີໂນອີກບັດໜຶ່ງ ທີ່ມີຊື່ເປັນ ຖ້ອຍຄຳ (ຈະຕຸລັດ).

ເກມການຮຽນຮູ້. ທ່ານ ແລະ ນັກຮຽນຂອງທ່ານສາມາດສ້າງກິດຈະກຳການຮຽນຮູ້ ໂດຍອີງ ໃສ່ເກມງ່າຍໆໄດ້ ຫລື ບໍ່? ນັ້ນມີວິທີການດັ່ງນີ້!

- ໃຫ້ສັງເກດ ຫລື ສົນທະນາກັບນັກຮຽນຂອງທ່ານເຖິງເກມທີ່ເຂົາຫລິ້ນຢູ່ນອກມີຫຍັງແດ່? ເຂົາໃຊ້ກົດອັນໃດ? ເພື່ອນັບຄະແນນ? ພວກເຂົາຮ້ອງເພງ ຫລື ໃຊ້ຄຳສຳຜັດ? ມີຫລິ້ນຕ່າງ ກັນ ສຳລັບ ເດັກຊາຍ ແລະ ເດັກຍິງບໍ່? ຍ້ອນຫຍັງ?
- ບອກໃຫ້ເດັກພັດທະນາປຶ້ມເກມ ທີ່ຜູ້ອື່ນສາມາດຮຽນນຳໄດ້. ເດັກສາມາດວິໄຈຄົ້ນຄວ້າ ເກມທີ່ສະມາຊິກໃນຄອບຄົວອາດເຄີຍຫລິ້ນ ໃນສະໄໝທີ່ເຂົາຍັງຮຽນຢູ່ໂຮງຮຽນ ຫລື ເປັນ ເກມເຊິ່ງເປັນ ສ່ວນໜຶ່ງຂອງວັດທະນະທຳທ້ອງຖິ່ນ ຫລື ວັດທະນະທຳອື່ນໆຫລືບໍ່?.
- ເຊື່ອມໂຍງເກມ ຫລື ກິດຈະກຳໃສ່ຫົວຂໍ້ທີ່ທ່ານສອນ, ຕົວຢ່າງ ຄະນິດສາດ.

ການທັດສະນະສຶກສາພາກສະໜາມ ແລະ ການຫລິ້ນເກມສາມາດກະຕຸ້ນເດັກທຸກຄົນ ເພື່ອ ຮຽນຮູ້. ນີ້ແມ່ນອີກບາງວິທີເພື່ອເພີ່ມທະວີການຈູງໃຈ:

- ໃຊ້ຕົວຢ່າງທີ່ເປັນຮູບປະທຳທີ່ມາຈາກພື້ນທີ່ທ້ອງຖິ່ນທີ່ມີຄວາມຫມາຍ ສຳລັບ ເດັກຍິງ ແລະ ເດັກຊາຍ
- ລວມທັງເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ.
- ໃຫ້ໂອກາດເດັກເຫລົ່ານີ້ ນຳໃຊ້ສິ່ງທີ່ເຂົາໄດ້ຮຽນຮູ້ຈາກກິດຈະກຳຊີວິດປະຈຳວັນ ເຊັ່ນ: ການຫາປາ, ການເຮັດນາເຂົ້າ ຫລືການຕັກນ້ຳ.
- ນຳໃຊ້ວິທີການສິດສອນແບບຫລາກຫລາຍທີ່ໜ້າຈັບໃຈ ແລະ ດຶງເດັກເຂົ້າມີສ່ວນຮ່ວມ ຢ່າງຫ້າວຫັນໃນການຮຽນຮູ້.

2.5 ການເຮັດໃຫ້ວິຊາຄະນິດສາດ, ວິທະຍາສາດ ແລະ ພາສາມີຄວາມຫມາຍ ສຳລັບ ທຸກຄົນ

ວິຊາຄະນິດສາດ, ວິທະຍາສາດ ແລະ ພາສາ(ອ່ານ ແລະ ຂຽນ) ເປັນວິຊາຫລັກໃນທຸກໆ ໂຮງຮຽນຂອງພວກເຮົາ. ມັນຍັງເປັນວິຊາທີ່ທ້າທາຍ/ຍາກສຳລັບເດັກ. ໃນວິຊາທັງຫມົດເຫລົ່ານີ້

ເດັກຈະຮຽນແນວຄວາມຄິດທີ່ເປັນນາມມະທຳ ທີ່ອາດຍາກສຳລັບເຂົາຈະເຂົ້າໃຈໄດ້. ນອກຈາກ ວ່າເດັກຂອງທ່ານ ຈະສາມາດເຊື່ອມແນວຄວາມຄິດ ແບບນາມມະທຳໃສ່ກັບສິ່ງທີ່ເຂົາເຮັດໃນ ຊີວິດປະຈຳວັນຂອງເຂົາ. ພວກເຂົາສາມາດເຂົ້າໃຈແນວຄວາມຄິດທີ່ເປັນນາມມະທຳ ແລະ ຈະ ສາມາດເລີ່ມນຳໃຊ້ມັນໄດ້ ໂດຍ ຜ່ານທັກສະທີ່ສຳຄັນ.

ການຮຽນຮູ້ແບບເປັນເພື່ອນມິດໃນວິຊາຄະນິດສາດ

ຢູ່ໃນໂຮງຮຽນ, ຄະນິດສາດຈະຄ້າຍກັບວ່າບໍ່ໄດ້ ພົວພັນຫຍັງກັບ ກິດຈະວັດປະຈຳວັນຂອງ ພວກເຮົາ. ຖ້າພວກເຮົາມີຄວາມພະຍາຍາມ, ຈະສາມາດຊ່ອຍເດັກ ໃຫ້ສ້າງການເຊື່ອມໂຍງກັນ ລະຫວ່າງ ທັກສະດ້ານຄະນິດສາດ, ແນວຄວາມຄິດລວມຍອດ ແລະ ການຄົ້ນຄິດດ້ານຄະນິດ ສາດກັບຄະນິດສາດຂອງຊີວິດປະຈຳວັນເຊັ່ນວ່າເລື່ອງທີ່ໃຊ້ກັນໃນຕະຫລາດ.
ຕົວຢ່າງ : ການຫລິ້ນບົດບາດສົມມຸດ ເຊິ່ງນັກຮຽນທຳທ່າໄປຕະຫລາດ ອາດສາມາດເປັນເລື່ອງ ມ່ວນ ແລະ ມີຄວາມຫມາຍ ສຳລັບເດັກໃນການຮຽນຮູ້ຄະນິດສາດ. ມັນຍັງເປັນໂອກາດ ສຳລັບ ເດັກທີ່ຈະພັດທະນາຄວາມໝັ້ນໃຈ ເມື່ອເວົ້າຢູ່ໃນຫ້ອງ ອີກດ້ວຍ.

ການສ້າງທັກສະພື້ນຖານ ໂດຍການໃຊ້ວັດຖຸສິ່ງຂອງທີ່ເປັນຮູບປະທຳ

ເດັກນັກຮຽນຈະສາມາດເຂົ້າໃຈງ່າຍຂຶ້ນເພື່ອຮຽນເລກບວກ, ເລກລົບ, ເລກຄູນ ແລະ ເລກ ຫານ ເມື່ອພວກເຂົາໃຊ້ວັດຖຸສິ່ງຂອງຊ່ອຍ ເຊັ່ນ ກ້ອນຫີນນ້ອຍ, ໃນຫມາກຖົ່ວແຫ້ງ, ເປືອກຫອຍ, ໄມ້ຫູ່ ຫລື ແກ່ນຫມາກໄມ້. ສິ່ງຂອງເຫລົ່ານີ້ ສາມາດຊ່ອຍການເຮັດເລກຄະນິດ ບາງຢ່າງ ເຊິ່ງເດັກສາມາດເຫັນ ຫລື ຮູ້ສຶກສຳພັດໄດ້ ບໍ່ແມ່ນມີ ພຽງແຕ່ໃຫ້ຄິດເທົ່ານັ້ນ.

ເມື່ອເດັກໄດ້ເຫັນ ຫລື ສຳພັດແລ້ວມີເຄື່ອນໄຫວດ້ວຍເຂົາເອງ ແລະ ຈະມີປະສົບການ ເຖິງການພັດທະນາການທາງຮ່າງກາຍ ເທື່ອລະເລັກລະນ້ອຍລວມທັງດ້ານປັນຍາດ້ວຍ. ນັກຮຽນ ທີ່ໃຊ້ສາຍຕາຮຽນຮູ້ ແລະ ນັກຮຽນທີ່ໃຊ້ການສຳພັດຮຽນຮູ້ຈະໄດ້ຜົນປະໂຫຍດຢ່າງໃຫຍ່ຫລວງ ໂດຍການໃຊ້ສື່ການສອນ.

ການໃຊ້ສື່ ສິ່ງຂອງທີ່ມີຂະໜາດ ແລະ ຮູບຊົງແຕກຕ່າງກັນ

ສື່ ສິ່ງຂອງທີ່ມີຂະໜາດ ແລະ ຮູບຮ່າງແຕກຕ່າງກັນຈະຊ່ອຍເດັກໃຫ້ເຂົ້າໃຈເລື່ອງບໍລິມາດ, ມິຕິ ແລະ ເລຂາຄະນິດ (ຮູບຊົງ). ສື່ ສິ່ງຂອງເຫລົ່ານີ້ອາດສາມາດປະກອບດ້ວຍ ຮູບກ້ອນ, ຮູບປິລາມິດ, ຮູບສີ່ຫລ່ຽມ, ຮູບທໍ່ກົມ ແລະ ຮູບຊົງອື່ນໆທີ່ແກະສະຫລັກມາຈາກໄມ້ ຫລື ເຮັດດ້ວຍ ກະດາດໜາ. ບອກໃຫ້ກຸ່ມເດັກສຳຫລວດເບິ່ງໂຮງຮຽນ ແລະ ສະພາບແວດລ້ອມໂຮງຮຽນ ເພື່ອ ທີ່ຈະຄົ້ນຫາບັນດາຮູບຊົງຕ່າງໆ ທີ່ນຳໃຊ້ໃນຊີວິດປະຈຳວັນ. ຕົວຢ່າງ : ກະປ໋ອງມີຮູບເປັນທໍ່ກົມ, ດິນຈີ່ມີຮູບເປັນສີ່ຫລ່ຽມ, ຮູບ ສາມຫລ່ຽມຕ່າງໆຈະສ້າງຮູບຊົງຄ້ຳຫລັງຄາ ແລະ ອື່ນໆ.

ການໃຊ້ວິທີສິດສອນແບບແຕກຕ່າງຫລາກຫລາຍ: ເຮັດ, ເວົ້າ ແລະ ບັນທຶກ

ໃນການພັດທະນາທັກສະທາງດ້ານຄະນິດສາດ, ເດັກຈຳເປັນຕ້ອງມີສ່ວນຮ່ວມ ໃນການເຮັດກິດຈະກຳພາກປະຕິບັດ; ພວກເຂົາຈຳເປັນຕ້ອງຮຽນຮູ້ວິທີເວົ້າກ່ຽວກັບຄະນິດສາດ; ແລະ ພວກເຂົາຈຳເປັນຕ້ອງບັນທຶກ(ຂຽນ) ວິທີທີ່ເຂົາພະຍາຍາມແກ້ໂຈດບັນຫາຄະນິດສາດຕ່າງໆ.

- ພາກສ່ວນທີ່ຕ້ອງ **"ເຮັດ"** ໃນຂະບວນການນີ້ຈະກ່ຽວພັນກັບກິດຈະກຳ (ຕົວຢ່າງ: ການນັບແກ່ນໝາກຖົ່ວ ແລ້ວຫັກລົບອອກບາງສ່ວນ).
- ພາກສ່ວນທີ່ຕ້ອງ **"ເວົ້າ"** ແມ່ນການສົນທະນາອະທິບາຍກັບຄູ່ຮ່ວມງານ ຫລື ໃນກຸ່ມນ້ອຍ ເຊັ່ນ "ຂ້ອຍຄິດວ່າມັນຄວນຈະເປັນ 6 ບໍ່ແມ່ນ 5..."
- ພາກສ່ວນທີ່ຕ້ອງ **"ບັນທຶກ"** ແມ່ນຂຽນລາຍລະອຽດຂອງຂະບວນການຊອກຫາຄຳຕອບ ເພື່ອໃຫ້ຄູສາມາດເວົ້າຄຸຍກັບເດັກ ກ່ຽວກັບວິທີການອື່ນໆ ເພື່ອການແກ້ໂຈດບັນຫາ.

ຕົວຢ່າງ: ເດັກອາດຈະຖືກບອກໃຫ້ວັດແທກຮູບຊົງໃດໜຶ່ງ ແລະ ຫາລວງອ້ອມ ແລະ ໜ້າພຽງ **(ເຮັດ).** ແຕ່ລະກຸ່ມສາມາດສົນທະນາຖົກຖຽງການເຮັດການວັດແທກ**(ເວົ້າ).** ຜົນຂອງແຕ່ລະກຸ່ມສາມາດເອົາມາ ປະສົມປະສານລວມກັນກັບກຸ່ມອື່ນໆ ແລະ ຂຽນອອກເພື່ອສະແດງຜົນຂອງທັງຫມົດ ຫ້ອງຮຽນ **(ບັນທຶກ).** ການສົນທະນາໃນຫ້ອງຮຽນອາດຈະຕາມມາ.

ການເຊື່ອມໂຍງຄະນິດສາດເຂົ້າກັບຊີວິດປະຈຳວັນ

ຈາກຜົນຂອງການວິໄຈພົບວ່າ : ເດັກສາມາດວາດແຕ້ມສາຍພົວພັນ ລະຫວ່າງການປະຕິບັດການແບບງ່າຍໆ ກັບສິ່ງທີ່ມີຄວາມສະຫລັບສັບຊ້ອນກວ່າ. ເນັ້ນໃສ່ໜ້າທີ່ຂອງຄະນິດສາດ ໃນຊີວິດປະຈຳວັນ ເຊັ່ນ ການຄິດໄລ່ເວລາ ແລະ ໄລຍະທາງ ເພື່ອຈະເດີນທາງຈາກເຮືອນຫາໂຮງຮຽນ, ການປະມານຈຳນວນເນື້ອທີ່ວ່າງເປົ່າ ເພື່ອເຮັດເດີ່ນກິລາ ແລະ ລາຄາຜັກທີ່ຊື້ຢູ່ຕະຫລາດ. ຍ້ອນວ່າມັນເປັນກິດຈະກຳປະຕິບັດ ແລະ ມັນເນັ້ນໃສ່ອົງປະກອບຕ່າງໆ ທີ່ນັກຮຽນຄຸ້ນເຄີຍ, ໂຈດບັນຫາຄືເຊັ່ນນີ້ຈຶ່ງພັດທະນາທັກສະທາງຄະນິດສາດ ໂດຍການນຳໃຊ້ສິ່ງຂອງຈິງບໍ່ແມ່ນແຕ່ຈະໃຊ້ສິ່ງທີ່ເປັນນາມມະທຳ.

ທ່ານສາມາດຊ່ອຍເດັກທີ່ມີວິທີຮຽນຮູ້ ແລະ ມີຄວາມຕ້ອງການການຮຽນຮູ້ແຕກຕ່າງກັນ ໂດຍອີງ ໃສ່ບັນດາກິດຈະກຳທີ່ແຕກຕ່າງກັນ. ກິດຈະກຳທີ່ພວກເຮົາປະຕິບັດທຸກມື້ ຈະສາມາດ ຊ່ອຍເດັກຮູ້ໃຊ້ສື່ ສິ່ງຂອງທີ່ເປັນຮູບປະທຳ ແລະ ໂດຍການພັນລະນາເຖິງແນວຄວາມຄິດ ລວມຍອດຂອງຄະນິດສາດ ແບບປາກເປົ່າ, ແບບປະຈັກຕາ ແລະ ໂດຍຜ່ານການຈັບຕ້ອງ. ເມື່ອເຮັດໄດ້ຄືແນວນັ້ນ, ພວກເຮົາຈະຮັບປະກັນໄດ້ວ່າການຮຽນຮູ້ຄະນິດສາດ ມີຄວາມຫມາຍ ສຳລັບເດັກ**ທຸກຄົນ**.

ກິດຈະກຳປະຕິບັດ: ຄະນິດສາດ ແລະ ຊຸມຊົນ

ລຽງລຳດັບວິທີຕ່າງໆທີ່ຊຸມຊົນຂອງທ່ານໃຊ້ຄະນິດສາດ; ເຊັ່ນຕົວຢ່າງ, ບອກໃຫ້ເດັກຂອງທ່ານດຳເນີນການສຳຫລວດແບບງ່າຍໆ ກ່ຽວກັບຄະນິດສາດ ຖືກນຳໃຊ້ໃນຄອບຄົວຂອງເຂົາຄື ແນວໃດ ? ນີ້ເປັນວິທີທີ່ດີເພື່ອໃຫ້ເຂົາຄົ້ນຄິດ. ໃຫ້ລຽງລຳດັບວິທີການຕ່າງໆກ່ຽວກັບກິດຈະວັດທາງຄະນິດສາດໃນອາ ທິດໜຶ່ງຜ່ານມາທີ່ທ່ານໄດ້ເຮັດເປັນປະຈຳ.

ໃຫ້ລົມກັບເດັກນັກຮຽນ ຫລື ສະມາຊິກຊຸມຊົນ ເພື່ອຊອກຮູ້ເບິ່ງວ່າມີນິທານ ຫລື ຕຳນານ ທ້ອງຖິ່ນທີ່ກ່ຽວຂ້ອງກັບເວລາ, ໄລຍະທາງ, ເພງ, ບົດຟ້ອນ ທີ່ກ່ຽວພັນກັບເນື້ອໃນບົດ ໃຫ້ສອດ ແຊກສິ່ງເຫລົ່ານີ້ ເຂົ້າໃນແຜນການສອນຂອງທ່ານ.

ໃຫ້ໃຊ້ຊື່ຄົນ,ສັດ,ສິ່ງຂອງ ແລະ ສະຖານທີ່ທ້ອງຖິ່ນ ເພື່ອໃຫ້ເດັກສາມາດເຂົ້າໃຈຄຳຖາມ ຂອງ ທ່ານ ດີຂຶ້ນ.ຕົວຢ່າງ: ທ້າວ ຈອນ ຍ່າງໄປຕັກນ້ຳຢູ່ສ້າງຂອງຊຸມຊົນ ທີ່ຫ່າງຈາກເຮືອນຂອງ ລາວປະມານກວ່າ ເຄິ່ງກິໂລແມັດ. ຖັງນ້ຳຂອງລາວສາມາດບັນຈຸນ້ຳໄດ້ 5 ລິດ. ທ້າວຈອນ ຕ້ອງຍ່າງເອົານ້ຳເຕັມຖັງມາຮອດ ເຮືອນໄກປານໃດ?

ກິດຈະກຳເພື່ອປະຕິບັດ: ວິຊາຄະນິດສາດ ແລະ ສຸຂະອະນາໄມ

ການຮຽນຮູ້ກ່ຽວກັບສຸຂະພາບແລະການພັດທະນາການຂອງເດັກ ໂດຍຜ່ານກິດຈະກຳການ ສອນ ວິຊາຄະນິດສາດ.

- ♦ ເດັກສາມາດວັດແທກຄວາມສູງ ແລະ ນ້ຳໜັກຂອງເຂົາ. ການວັດແທກນີ້ ຈະຖືກບັນ ທຶກເປັນເສັ້ນສະແດງ ສຳລັບເດັກທຸກຄົນ ແລະ ເຮັດໃຫ້ເປັນ ປັດຈຸບັນສະເໝີ. ຂໍ້ມູນ ຂອງພວກເຂົາຈະຊ່ວຍໂຮງຮຽນ ແລະ ແພດທ້ອງຖິ່ນ ທີ່ຈະກຳນົດເດັກທີ່ຂາດສານ ອາຫານ ເພື່ອລົງທະບຽນ ເຂົ້າໃນໂຄງການອາຫານກາງວັນ.

- ♦ ການສຳຫລວດການເຈັບເປັນ ສາມາດດຳເນີນການໄດ້ ໃນຫ້ອງຮຽນ ຫລື ໂຮງຮຽນ. ຍົກຕົວຢ່າງ: ເດັກສາມາດບັນທຶກຈຳນວນເພື່ອນໃນຫ້ອງຜູ້ທີ່ເປັນໂລກຫັດ, ຂີ້ກາກ, ໄຂ້ຍຸງ ຫລື ບັນຫາສຸຂະພາບອື່ນໆ ໃນຊ່ວງເວລາໃດໜຶ່ງທີ່ຜ່ານມາ. ຜົນສຳຫລວດຈະ ຂຽນອອກມາເປັນອັດຕາສ່ວນ ຫລື ເປັນເປີເຊັນ. ຈາກນັ້ນ ກໍສາມາດດຳເນີນການ ເພື່ອ ປ້ອງກັນບາງຄວາມເຈັບ ປ່ວຍເຫລົ່ານີ້.

ກິດຈະກຳສະທ້ອນພາບ: ຂ້ອຍສອນວິຊາຄະນິດສາດແນວໃດ?

ໃຫ້ວິເຄາະວິທີການທີ່ທ່ານສອນວິຊາຄະນິດສາດໂດຍຕື່ມທີ່ຫວ່າງໃນຕາຕະລາງດັ່ງຕໍ່ ໄປນີ້:

ວິທີຕ່າງໆທີ່ໃຊ້ສອນ/ກິດຈະກຳຕ່າງໆ	ຂ້ອຍເຮັດເລື້ອຍໆ	ຂ້ອຍບໍ່ຄ່ອຍໄດ້ເຮັດ	ສິ່ງທີ່ຂ້ອຍຈຳເປັນຕ້ອງເຮັດ
ຊຸກຍູ້ສິ່ງເສີມໃຫ້ເດັກຊາຍ ແລະ ເດັກຍິງໃຊ້ສື່ ອຸປະກອນປະຕິບັດຕົວຈິງ			
ເຊື່ອມໂຍງຄຳຖາມຄະນິດສາດກັບກິດຈະກຳສຸຂະພາບ ຫລື ຊຸມຊົນ			
ໃຊ້ມຸມການຮຽນຮູ້ວິຊາຄະນິດສາດ			
ກວດກາສື່ ອຸປະກອນການຮຽນຮູ້ທີ່ລຳອຽງບົດບາດຍິງຊາຍ			

ການຮຽນຮູ້ແບບເປັນເພື່ອນມິດໃນວິຊາວິທະຍາສາດ

ເມື່ອພວກເຮົາສຶກສາວິທະຍາສາດ, ພວກເຮົາສຳຫລວດແຫ່ງກຳເນີດທີ່ນ້ອຍທີ່ສຸດຂອງໂມລະກຸນ ແລະ ຈຸລັງ ເຊັ່ນ ປະລາມະນູ (Atoms) ແລະອາວະກາດທີ່ໄກແສນໄກ. ພວກເຮົາມີຄວາມຫຍຸ້ງຍາກຮຽນຮູ້ ປະລາມະນູ ແລະ ກາແລັກຊີມີຢູ່ຈິງ. ຢ່າງໃດກໍຕາມ, ພວກເຮົາພ້ອມທັງເດັກ ບໍ່ໄດ້ເຫັນມັນທຸກວັນ ແລະ ພວກເຮົາກໍບໍ່ຄ່ອຍໄດ້ຄິດກ່ຽວກັບມັນ. ໂດຍພື້ນຖານທຸກວັນ ພວກເຮົາກໍຍັງບໍ່ໄດ້ເວົ້າກ່ຽວກັບມັນດ້ວຍ. ຍ້ອນແນວນັ້ນ, ເພື່ອເຮັດໃຫ້ວິຊາວິທະຍາສາດມີການຮຽນຮູ້ແບບເປັນເພື່ອນມິດ, ພວກເຮົາຈຳ ເປັນຕ້ອງຕໍ່ສູ້ກັບຄວາມສົມດູນລະຫວ່າງສິ່ງທີ່ເປັນຈິງ (ສິ່ງທີ່ພວກເຮົາ ເຫັນ, ສຳພັດ ຫລື ໄດ້ກິ່ນ) ກັບສິ່ງ ທີ່ຮູ້ຈັກ (ສິ່ງທີ່ເປັນນາມມະທຳ, ເຊັ່ນ ປະລາມະນູ ແລະ ກາແລັກຊີ) ດ້ວຍການເລີ່ມກັບສິ່ງທີ່ ເປັນຈິງ ແລະ ການເຊື່ອມໂຍງວິທະຍາສາດ ໃສ່ກັບສິ່ງທີ່ເດັກເຄີຍເຫັນ ຫລື ເຄີຍເຮັດປະຈຳວັນ, ເດັກສາມາດ ທີ່ຈະພັດທະນາທັກສະດ້ານ ການສື່ສານໄດ້ດີຂຶ້ນ. ພວກເຂົາສາມາດທີ່ຈະເວົ້າເຖິງວິທະຍາສາດ ແລະ " ຊີວິດຈິງ ". ຈາກນັ້ນ ເຂົາຈະສາມາດເຮັດວຽກເພື່ອກ້າວໄປສູ່ຄວາມເຂົ້າໃຈ ແລະ ເວົ້າກ່ຽວກັບແນວຄິດ ຫລື ແນວ ຄວາມຄິດທີ່ເປັນນາມມະທຳຢ່າງເປັນວິທະຍາສາດ.

ໃນວິຊາຄະນິດສາດ, ການຮຽນຮູ້ວິທະຍາສາດ ສາມາດສິ່ງເສີມໄດ້ ໂດຍຜ່ານກິດຈະກຳທີ່ ເປັນຮູບ ປະທຳກ່ຽວກັບຫົວຂໍ້ ເຊັ່ນ : ພືດ ແລະ ສັດ, ຮ່າງກາຍຂອງມະນຸດ, ນ້ຳ ແລະ ການ ປະຕິຮູບທີ່ດິນ, ສິ່ງ ແວດລ້ອມທີ່ເປັນທຳມະຊາດ ແລະ ມະນຸດເປັນຜູ້ສ້າງສຸງ ແລະ ດິນຕີ, ລະບົບ ສຸລິຍະຈັກກະວານ ແລະ ອື່ນໆ. ຍິ່ງໄປກວ່ານີ້, ການຕິດປ້າຍສະຫລາກຮູບແຕ້ມຕົ້ນໄມ້ ກໍເປັນ ເສັ້ນທາງໜຶ່ງຂອງການສອດແຊກທັກສະການຂຽນ ແລະ ການແຕ້ມເຂົ້າໄປດ້ວຍ ແລະ ມັນເປັນ ຮູບແບບທີ່ດີເລີດຂອງການສື່ສານ ໃນວິທະຍາສາດ. ຍັງເປັນບາດກ້າວທີ່ດີ ເພື່ອນຳໄປສູ່ການຕິດ ປ້າຍສະຫລາກອື່ນໆ ທີ່ມີລັກສະນະນາມມະ ທຳເຂົ້າໃຈຍາກກວ່າອີກ ເຊັ່ນ ເລື່ອງກ່ຽວກັບລະບົບ ດາວເຄາະ ຫລື ອະໄວຍະວະພາຍໃນຂອງຮ່າງກາຍ.

ສິ່ງສຳຄັນກໍຄື ໃນຖານະທີ່ເປັນຄູ ພວກເຮົາຮຽນຮູ້ແນວຄວາມຄິດທີ່ເປັນວິທະຍາສາດ ທີ່ສຳຄັນ ເພື່ອວ່າເຮົາຈະສາມາດເຊື່ອມໂຍງກິດຈະກຳປະຈຳວັນຂອງເດັກ ໃສ່ກັບແນວຄວາມຄິດຕ່າງໆນັ້ນໄດ້ໂດຍງ່າຍ ເພື່ອຊ່ວຍເຂົາຮຽນຮູ້.

ບາດກ້າວເພື່ອຊ່ວຍເດັກໜຸ່ມນ້ອຍຈັດປະເພດໝວດໝູ່

1. ຂ້ອຍຕ້ອງການຈັດປະເພດໝວດໝູ່ອັນໃດ ?
2. ມີສິ່ງໃດແດ່ທີ່ຄ້າຍຄືກັນ ທີ່ຂ້ອຍສາມາດຈັດໃສ່ກຸ່ມດຽວກັນ ?
3. ສິ່ງຕ່າງໆເຫລົ່ານີ້ມີຄວາມຄ້າຍຄືກັນໃນທາງໃດແດ່ ?
4. ຂ້ອຍຈະສາມາດເຮັດເປັນກຸ່ມອື່ນໆອັນໃດໄດ້ ?
   ສິ່ງຕ່າງໆໃນແຕ່ລະກຸ່ມຄ້າຍຄືກັນຢ່າງໃດ ?
5. ບັດນີ້ ທຸກໆສິ່ງເໝາະສົມທີ່ຈະຈັດເຂົ້າໃນກຸ່ມດຽວກັນຫລືບໍ່ ?
6. ອາດເປັນການດີກວ່າຫລືບໍ່ທີ່ຈະຈັດແບ່ງສິ່ງໃດສິ່ງໜຶ່ງອອກຫລືຈະລວມເຂົ້າໄປໃນກຸ່ມດ້ວຍກັນ ?
7. ຂ້ອຍສາມາດແຕ້ມແຜນພູມສະແດງເພື່ອນຳສະເໜີວິທີທີ່ຂ້ອຍຈັດແບ່ງປະເພດໝວດໝູ່ສິ່ງຂອງຕ່າງໆໄດ້ບໍ່ ?

ວິທີການອື່ນໆຂອງການຄົ້ນຄິດ ແລະ ການຮຽນຮູ້

ວິທີການຫາຄວາມເຂົ້າໃຈກ່ຽວກັບທຳມະຊາດ ແລະ ໂລກອ້ອມຮອບຕົວອາດເຊື່ອມໂຍງກັບປະສົບການທາງສັງຄົມ ຫລືການສັງເກດຫລາຍກວ່າທີ່ຈະເປັນການທົດລອງທາງວິທະຍາສາດ. ເດັກບາງຄົນອາດເປັນການສັບສົນ ເພາະວ່າວິທີການອະທິບາຍໃນໂຮງຮຽນອາດແຕກຕ່າງຈາກເລື່ອງ ລາວ/ນິທານທີ່ເຂົາເຄີຍໄດ້ຍິນທີ່ຄອບຄົວ. ຕົວຢ່າງ : ສະມາຊິກຂອງ ຊຸມຊົນອາດຈະອະທິບາຍການນຳໃຊ້ສະໝູນໄພເພື່ອປິ່ນປົວ ຫລື ເຂົາອາດເລົ່າເລື່ອງລາວ ທີ່ອະທິບາຍເຖິງການບຸກເບີກທີ່ດິນເພື່ອທຳການປູກຝັງ. ບາງຄັ້ງຂໍ້ມູນອາດບໍ່ກົງກັບຄວາມຮູ້ທີ່ມີໃນປຶ້ມແບບຮຽນ. ອີກເທື່ອໜຶ່ງ ເລື່ອງເລົ່າຂານ/ນິທານເປັນ ພາກສ່ວນໜຶ່ງທີ່ສຳຄັນຂອງວັດທະນະທຳຊຸມຊົນ ແລະ ຖືກສອນກັນມາຈາກຄົນລຸ້ນໜຶ່ງສູ່ຄົນລຸ້ນຕໍ່ໄປ.

ການຮຽນຮູ້ແບບຮຽນຮ່ວມຫມາຍເຖິງການໂອບອຸ້ມເອົາຄວາມຫລາກຫລາຍທາງແນວຄິດລວມທັງ ຄວາມແຕກຕ່າງຂອງເດັກ ແລະ ວິທີການຮຽນຮູ້ຂອງເຂົາ. ເດັກຈຳເປັນຕ້ອງເຂົ້າໃຈວ່າມີຫລາຍວິທີທາງ ທີ່ຈະອະທິບາຍວັດຖຸສິ່ງຂອງ ແລະ ເຫດການຕ່າງໆ ແລະ ພວກເຮົາກໍມີຄວາມປາຖະໜາທີ່ຈະຍອມຮັບ ການອະທິບາຍທີ່ແຕກຕ່າງກັນໂດຍປາສະຈາກການຕັດສິນວ່າຖືກ ຫລື ຜິດ. ຜູ້ຮຽນທີ່ຍັງໜຸ່ມນ້ອຍອາດ ໄດ້ຮຽນຮູ້ແລ້ວເລື່ອງເລົ່າ, ເລື່ອງທີ່ກ່າວຂານກັນ ພ້ອມທັງ ວິທີທີ່ຈະຮູ້ຈັກ ແລະ ການປິ່ນປົວ.

ກິດຈະກຳເພື່ອປະຕິບັດ : ວິທະຍາສາດ ແລະ ຊີວິດປະຈຳວັນ

ຄວາມຮູ້ທາງວິທະຍາສາດສາມາດຊ່ອຍໃຫ້ເຂົ້າໃຈກ່ຽວກັບວິທີທາງການດຳລົງຊີວິດ. ຕົວຢ່າງ : ນ້ຳ ເປັນຫົວຂໍ້ທີ່ສາມາດສຳຫລວດໄດ້ຫລາຍວິທີ ແລະ ມັນມີຄວາມຈຳເປັນໃຫຍ່ຫລວງ ສຳລັບຊີວິດຂອງທຸກຄົນ. ໂດຍການສຶກສານ້ຳ, ພວກເຮົາສາມາດສັງລວມຮູບແບບຕ່າງໆ ຂອງ ຄວາມຮູ້ວິທະຍາສາດ ລວມທັງການເຊື່ອມໂຍງກັບວິຊາອື່ນໆ ເຊັ່ນ ຄະນິດສາດ, ພາສາ ແລະ ສັງຄົມສາດ. ຕົວຢ່າງ : ເມື່ອພວກເຮົາຕົ້ມນ້ຳເພື່ອເຮັດໃຫ້ມັນບໍລິສຸດ, ພວກເຮົາກຳລັງຂ້າເຊື້ອ ຈຸລິນຊີທີ່ພວກເຮົາບໍ່ສາມາດມອງເຫັນໄດ້ ເຊິ່ງບໍ່ເຄີຍຮູ້ຈັກ ກ່ອນທີ່ນັກວິທະຍາສາດຈະຄົ້ນພົບມັນ. ເມື່ອພວກເຮົາໃຊ້ບ້ຳມື ບ້ຳນ້ຳຈາກສ້າງເຮົາກຳລັງໃຊ້ເຄື່ອງຈັກແບບງ່າຍໆ, ເມື່ອເມກເຝ້ືອກ່ຳຕົວ, ຟ້າຜ່າ/ຟ້າແມບລົງພື້ນດິນ ແລ້ວຝົນກໍຕົກ, ພວກເຮົາມີປະສົບການກັບພະລັງແຫ່ງທຳມະຊາດ ໃຫ້ອອກແບບບົດສອນໃໝ່ທີ່ເຊື່ອມ ຄວາມຮູ້ວິທະຍາສາດ ແລະ ການສຳຫລວດກັບຊີວິດປະ ຈຳວັນ.

- ມີຊັບພະຍາກອນຫັຍໆແດ່ທີ່ທ່ານຈະໃຊ້ໃນການສິດສອນນັກຮຽນຂອງທ່ານ?
- ນັກຮຽນຈະຖືກຂໍໃຫ້ຕັ້ງຄຳຖາມພາຍໃນກອບຫລືບໍ່ ? ຕົວຢ່າງ :ເງົາຈະປະກອບເປັນ ຮູບຊົງຂຶ້ນຍ້ອນໄມ້ສຽບ ຕອນ 9 :00ໂມງ ຈະຍາວກວ່າຕອນທ່ຽງ ຫລືບໍ່ ?
- ມີກິດຈະກຳຫຍັງແດ່ທີ່ເຂົາສາມາດເຮັດທົດສອບໂຈດຄຳຖາມຂອງເຂົາ?
- ຊັບພະຍາກອນຂໍ້ມູນຄວາມຮູ້ ເຊັ່ນ ປຶ້ມແບບຮຽນ ພວກເຂົາສາມາດໃຊ້ຫລືບໍ່?
- ທ່ານຈະປະເມີນຄວາມເຂົ້າໃຈໃນກິດຈະກຳໄດ້ຢ່າງໃດ?

ຫົວຂໍ້	ການສຳຫລວດ ປະຕິບັດ	ວັດສະດຸອຸປະກອນ ທ້ອງຖິ່ນທີ່ໃຊ້	ກ່ຽວຂ້ອງກັບ ຊີວິດປະຈຳວັນ	ວິທີປະເມີນ

ການວາງແຜນບົດສອນ ແລະ ການສິດສອນ

ເມື່ອຂຽນແຜນບົດສອນ,ສິ່ງສຳຄັນແມ່ນວາງແຜນວິທີທີ່ຈະໃຫ້ເດັກເຂົ້າມີສ່ວນຮ່ວມໃນການ ຮຽນຮູ້. ພວກເຮົາຕ້ອງຄຳນຶງເຖິງຫລັກສູດວິທະຍາສາດທີ່ທ່ານຈະສອນ. ສິ່ງນີ້ ໂດຍປົກກະຕິຂຶ້ນ ຢູ່ກັບວິທີສິດສອນແບບຕ່າງໆທີ່ເຮົາເລືອກ. ຕົວຢ່າງໜຶ່ງຂອງວິທີສິດສອນທີ່ມີປະສິດທິຜົນຄື: ຄິດ, ລົງມືເຮັດ, ຈັດຄູ່, ແລກ ປ່ຽນ. ວິທີນີ້ຈະກະຕຸກຊຸກຍູ້ການມີສ່ວນຮ່ວມຂອງເດັກພ້ອມທັງເດັກທີ່ຂີ້ອາຍ ທີ່ສຸດ ຫລື ເດັກທີ່ຮູ້ສຶກ ຖືກປະປ່ອຍ.

- ຖາມເດັກເປັນຄຳຖາມເປີດ ເຊັ່ນ ຄຳຖາມທີ່ບອກໃຫ້ເຂົາຕັດສິນໃຈກັບສິ່ງໃດໜຶ່ງ ຫລື ສະແດງ ແນວຄິດຄວາມເຫັນ.
- ຂໍໃຫ້ເດັກ **ຄິດ** ກ່ຽວກັບຄຳຕອບ.
- ຂໍໃຫ້ເດັກ **ຂຽນ ຫລື ລິຂິດ** ບັນທຶກກ່ຽວກັບຄຳຕອບ (ກະດານນ້ອຍຈະມີປະໂຫຍດ ເພື່ອຂຽນ ບັນທຶກສັ້ນໆ)
- ຂໍໃຫ້ເດັກ **ຈັບຄູ່** ເພື່ອແລກປ່ຽນທັດສະນະ ຄວາມຄິດເຫັນກັບຂາຄູ່.
- ຂໍໃຫ້ເດັກອາສາສະໝັກ(ເດັກຍິງ ແລະ ເດັກຊາຍ)**ແລກປ່ຽນ** ຜົນຂອງການສົນທະນາ ອະພິປາຍຂອງເຂົາຫມົດຫ້ອງ.

ວິທີການນີ້ເຮັດໃຫ້ໝັ້ນໃຈວ່າ ເດັກທຸກຄົນຈະມີໂອກາດທີ່ຈະຕອບ, ມີການແລກປ່ຽນຂໍ້ຄິດ ເຫັນ ແລະ ຄຳຕອບຂອງພວກເຂົາ. ນີ້ຄືສິ່ງສຳຄັນທີ່ສຸດ.ເດັກຈຳນວນໜຶ່ງພວກເຂົາອາດຈະຕ້ອງ ໃຊ້ເວລາທີ່ຫລາຍກວ່າ ເພື່ອກະກຽມຄຳຕອບ ຫລື ເຂົາບໍ່ເຂົ້າໃຈ ກໍຄິດວ່າ ເດັກຜູ້ອື່ນໆ ຈະຕອບ ຄຳຖາມຂອງ ທ່ານ. ຍິ່ງໄປກວ່ານັ້ນ, ເດັກຫລາຍຄົນຈະມີຄວາມຢ້ານກົວທີ່ຈະສະແດງອອກ ໂດຍ ສະເພາະຫາກ ພາສາແມ່ຂອງເຂົາ ບໍ່ແມ່ນພາສາທີ່ໂດຍປົກກະຕິບໍ່ໄດ້ໃຊ້ໃນຫ້ອງຮຽນ. ບາງຄັ້ງ ເດັກຍິງກໍເປັນຜູ້ດ້ອຍເສຍປຽບ ໂດຍວິທີການຂອງຄູຖາມຄຳຖາມ ຫລື ຄູມັກຖາມ ແຕ່ເດັກຜູ້ຊາຍ ໃຫ້ຕອບຄຳຖາມ ເຊັ່ນ ຄຳຖາມ ໃນວິຊາຄະນິດສາດ ແລະ ວິທະຍາສາດ. ຍ້ອນແນວນັ້ນ, ທັງ ເດັກຊາຍ ແລະ ເດັກຍິງ ຈຶ່ງຕ້ອງການໂອ ກາດເພື່ອເຂົ້າໃຈຄຳຖາມ ແລະ ພັດທະນາຄວາມ ໝັ້ນໃຈ ໃນການຕອບຄຳຖາມ. ການເຮັດວຽກເປັນຄູ່ ໃນວິທີການສິດສອນທີ່ສະເໜີຂ້າງເທິງຈະ ເຮັດໃຫ້ເດັກຝຶກປະຕິບັດຄຳສັບຢ່າງຖືກຕ້ອງ ເພື່ອສະແດງ ຄວາມຄິດເຫັນກັບຄົນອື່ນ.

ການເຊື່ອມໂຍງວິທະຍາສາດກັບຊີວິດປະຈຳວັນ

ການເຊື່ອມໂຍງວິທະຍາສາດກັບຊີວິດປະຈຳວັນຈະເຮັດໃຫ້ການຮຽນມີຄວາມຫມາຍສຳລັບ ເດັກ. ມັນຊ່ວຍພວກເຮົາໃນການວາງແຜນການສອນ ແລະ ຈັດຕັ້ງຫ້ອງຮຽນ. ວິທີທາງໜຶ່ງ ທີ່ດີ ໃນການປະຕິບັດແມ່ນເລີ່ມດ້ວຍສິ່ງທີ່ເດັກນັກຮຽນຮູ້ມາກ່ອນແລ້ວ ໂດຍການໃຊ້ ວິທີ **K W L H (KWLH method)**

K	W	L	H

K - ຫມາຍເຖິງການຊ່ວຍເຫລືອນັກຮຽນຫວນຄິດເຖິງສິ່ງທີ່ໄດ້ຮຽນຮູ້ **(Know)** ກ່ຽວກັບວິຊາ ຮຽນ.

W - ຫມາຍເຖິງການຊ່ວຍເຫລືອນັກຮຽນໃຫ້ຮູ້ກຳນົດ/ລະບຸສິ່ງທີ່ເຂົາ**ຕ້ອງການ (Want)** ຢາກຮຽນຮູ້.

L - ຫມາຍເຖິງການຊ່ອຍເຫລືອນັກຮຽນກຳນົດ/ລະບຸໃຫ້ໄດ້ສິ່ງທີ່ເຂົາ**ໄດ້ຮຽນຮູ້ແລ້ວ**

(Learned)

H - ຫມາຍເຖິງ **ວິທີໃດ (How)** ທີ່ເຂົາສາມາດຮຽນຮູ້ໄດ້ຫລາຍຂຶ້ນ (ແຫລ່ງຂໍ້ມູນຄວາມຮູ້ ເພີ່ມກ່ຽວ ກັບຫົວຂໍ້ທີ່ສາມາດຊອກໄດ້ ຫລື ຖາມຄຳຖາມຫລາຍຂຶ້ນຕື່ມ).

ການຮຽນຮູ້ແບບເປັນເພື່ອນມິດໃນທັກສະດ້ານພາສາ

ທັກສະດ້ານພາສາ ມີຄວາມສຳຄັນຫລາຍທີ່ສຸດ ຕໍ່ກັບຄວາມສາມາດຂອງເດັກ ທີ່ຈະຮຽນຮູ້ ໃນທຸກວິຊາ. ການຮຽນຮູ້ທີ່ມີຄວາມຫມາຍຈະເກີດຂຶ້ນໄດ້ ຖ້າຜູ້ຮຽນມີຄວາມເຂົ້າໃຈດີຕໍ່ພາສາ ທີ່ໃຊ້ສອນ. ບາງຄັ້ງພາສາໃນຄອບຄົວ(ທ້ອງຖິ່ນ) ຈະຈຳເປັນຕ້ອງໃຊ້ ເພື່ອໃຫ້ເດັກທຸກຄົນເຂົ້າ ເຖິງຂໍ້ມູນຄວາມຮູ້, ສາມາດສື່ສານແນວຄິດເຫັນຂອງຕົນ ແລະ ສາມາດເຂົ້າໃຈຕາມແນວທາງ ທີ່ມີຄວາມຫມາຍ.

ການເວົ້າ, ການຟັງ, ການອ່ານ ແລະ ການຂຽນ ແມ່ນທັກສະທີ່ຈຳເປັນຕ້ອງໃຊ້. ແລະ ປະ ສານ ລວມກັນທັງຫມົດເພື່ອເດັກຈະໄດ້ພັດທະນາຄວາມສາມາດທາງພາສາຢ່າງຮອບດ້ານ. ວິທີ ປະຕິບັດການ 2 ຢ່າງ ທີ່ສາມາດຊ່ອຍທ່ານໄດ້ຄື :

- ສ້າງໂອກາດໃຫ້ມີການຟັງ ແລະ ການອ່ານ ເພາະວ່າ ຜູ້ຮຽນຮູ້ສາມາດຈະຢັ່ງຮູ້ຂໍ້ມູນຂ່າວ ສານ ແລະ ສ້າງຄວາມເຂົ້າໃຈໂດຍຜ່ານສອງເສັ້ນທາງດັ່ງກ່າວ ; ແລະ
- ນຳໃຊ້ການເຮັດວຽກແບບຈັບຄູ່ ແລະ ກຸ່ມນ້ອຍເພື່ອຊ່ອຍເດັກຟັງ ແລະ ສະແດງອອກ ດ້ວຍຕົນເອງ. ຕົວຢ່າງ :ອອກໃຫ້ເດັກພັດທະນາ/ສ້າງບົດລະຄອນສັ້ນໆ ບົດລະຄອນຈະ ຊ່ອຍໃຫ້ພວກ ເຂົາສະແດງອອກດ້ວຍພາສາຂອງເຂົາເອງ ແລະ ຮຽນຮູ້ກ່ຽວກັບການ ລຳ ດັບເຫດການໃນບົດ ເລື່ອງ.

ໃນຫ້ອງຮຽນທ່ານສາມາດໃຫ້ໂອກາດສຳລັບເດັກ ເພື່ອທີ່ຈະຟັງດ້ວຍການອ່ານບົດເລື່ອງດັງ ພໍຄວນ. ແລະ ຍັງສາມາດທີ່ຈະເຊີນປະຊາຊົນຈາກຊຸມຊົນຂອງ ທ່ານ ເຂົ້າມາຢ້ຽມຫ້ອງແລ້ວເລົ່າ ກ່ຽວກັບວຽກງານ ຕ່າງໆທີ່ເຂົາເຮັດ, ເລົ່າເລື່ອງຊີວິດຂອງເຂົາ ຫລື ປະຫວັດຂອງບ້ານ. ຂໍໃຫ້ ແນ່ໃຈວ່າ ທ່ານ ເຊີນຄົນທີ່ ມີອາຍຸ, ຄົນສູງອາຍຸມັກຈະມີຫລາຍເລື່ອງລາວທີ່ຈະເລົ່າ ແລະ ໃຫ້ເວລາ ອ່າວຫລາຍເພື່ອໃຫ້ເຂົາເຈົ້າເລົ່າ. ເມື່ອປະຊາຊົນຖືກເຊື້ອເຊີນ, ທ່ານຄວນກຽມ ຜູ້ມາຢ້ຽມກ່ອນ ໂດຍການອະທິບາຍ ຈຸດປະສົງຂອງການເຊີນມາ. ໃຫ້ຊ່ອຍເຫລືອເດັກຍິງ ແລະ ເດັກຊາຍພັດທະ ນາທັກສະທາງສັງຄົມຂອງເຂົາ.

- ໃຜຈະເປັນຜູ້ກ່າວຕ້ອນຮັບແຂກມາຢ້ຽມ ?
- ເຮົາຈະກ່າວຕ້ອນຮັບຜູ້ທີ່ເຮົາບໍ່ຮູ້ຈັກແນວໃດ ?

- ເຮົາຈະເວົ້າກັບຜູ້ສູງອາຍຸແນວໃດ ?
- ຈະໃຫ້ເພິ່ນນັ່ງຢູ່ໃສ ?
- ເຮົາຈະກ່າວຂອບໃຈຜູ້ທີ່ໃຫ້ຄວາມຊ່ອຍເຫລືອເຮົາແນວໃດ ?

ສິ່ງເຫລົ່ານີ້ ລ້ວນແຕ່ ເປັນວິທີທາງທີ່ດີສຳລັບຝຶກປະຕິບັດການສື່ສານ ລວມທັງທັກສະທາງສັງຄົມ.

ການອ່ານດ້ວຍວິທີຕ່າງໆ

ພໍ່ແມ່ເດັກຫລາຍຄົນເປັນຫ່ວງກ່ຽວກັບການອ່ານຂອງລູກຫລານ. ບາງຄັ້ງຄວາມກັງວົນນີ້ ຈະກົດດັນນັກຮຽນ ແລະ ເຮັດໃຫ້ການຮຽນອ່ານ ກາຍເປັນການລົງໂທດ ແທນທີ່ຈະເຮັດໃຫ້ມີ ຄວາມສະໜຸກ. ການອ່ານມີຄວາມສະຫລັບຊັບຊ້ອນ ແລະ ມີຫລາຍວິທີແຕກຕ່າງ ເພື່ອຊ່ອຍເດັກ ຮຽນອ່ານ. ສ່ວນຫລາຍມັກຈະນຳໃຊ້ຢູ່ 2 ວິທີຄື: ວິທີ**ອ່ານອອກສຽງ** ແລະ ວິທີແບບພາສາທັງ ໝົດ.

(ການໃຊ້ເຄື່ອງໝາຍ, ສັນຍາລັກ, ຖ້ອຍຄຳ)

ຢູ່ໃນວິທີການອ່ານແບບອອກສຽງ, ຄຳສັບທີ່ຂຽນຈະຖືກແຍກອອກເປັນອົງປະກອບຍ່ອຍ. ອັກສອນຍ່ອຍທີ່ຂຽນເຫລົ່ານີ້ ຈະຈັບຄູ່ກັບສຽງກົງກັນ ແລ້ວປະສົມເຂົ້າກັນເພື່ອຜະລິດ ເປັນຄຳສັບ ຫລືຖ້ອຍຄຳ.

ວິທີແບບພາສາທັງໝົດ ຈະກ່ຽວຂ້ອງກັບການປະກອບຄວາມໝາຍ ລະຫວ່າງຖ້ອຍຄຳທັງ ໝົດກັບສິ່ງທີ່ເວົ້າ, ໂດຍປົກກະຕິຈະຢູ່ໃນບໍລິບົດ (ເນື້ອຄວາມ) ວ່າຖ້ອຍຄຳອາດຈະໃຊ້ຢ່າງໃດ. ຖ້ອຍຄຳ ອາດຖືກນຳສະເໜີໃນປະໂຫຍກສັ້ນໆ ເຊັ່ນ " ຫມາກບານສີຟ້າໜຶ່ງໜ່ວຍ...".

ທັງສອງວິທີຄວນຖືກນຳໃຊ້ ຍ້ອນວ່າຜູ້ຮຽນທີ່ແຕກຕ່າງກັນ ຈະຮຽນອ່ານດ້ວຍວິທີ ທີ່ບໍ່ ເຫມືອນກັນ. ເພື່ອຈະສອນການອ່ານໃຫ້ຜູ້ຮຽນທີ່ແຕກຕ່າງຫລາກຫລາຍທີ່ມີວິທີຮຽນຮູ້ ແລະ ພື້ນ ຖານບໍ່ເຫມືອນກັນ ຕ້ອງເຮັດ ດັ່ງນີ້:

- ♦ ໃຊ້ວິທີຫລາຍຢ່າງຫລາກຫລາຍ;
- ♦ ຢ່າແຍກທັກສະ ແລະ ຄວາມຫມາຍອອກຈາກກັນ;
- ♦ ຄວນຈື່ຈຳໄວ້ວ່າ ຜູ້ອ່ານຮຽນອ່ານ ແລະ ຂຽນ ຍ້ອນເຂົາຕ້ອງການສື່ສານ;
- ♦ ໃຫ້ຮູ້ວ່າການຮຽນອ່ານເກີດຂຶ້ນໄດ້ໃນສະພາບແວດລ້ອມທີ່ເອື້ອອຳນວຍ ເຊິ່ງເດັກຈະສ້າງທັດສະນະຄະຕິທີ່ຖືກຕ້ອງກ່ຽວກັບຕົນເອງ ແລະ ພາສາ
- ♦ ໃຫ້ອ່ານທຸກວັນໃຫ້ເດັກຫ້ອງນ້ອຍຟັງ ເພື່ອທີ່ຈະນຳເຂົາໄປສູ່ການອ່ານ ເພື່ອຂໍ້ມູນ ຄວາມຮູ້, ຄວາມສະໜຸກເພີດເພີນ ແລະ ເພື່ອສະແດງໃຫ້ເຂົາເຫັນວ່າ ທ່ານມ່ວນຊື່ນ ກັບການອ່ານ ນຳດ້ວຍ.

ວິທີທາງອື່ນໆເພື່ອສະໜັບສະໜູນການອ່ານ

ເດັກນັກຮຽນຄວນມີປຶ້ມອ່ານ ແລະ ບົດຄວາມທີ່ເໝາະສົມເພື່ອຈະອ່ານ ແລະ ສິ່ງເຫລົ່ານີ້ສາມາດຫາໄດ້ໃນຫ້ອງຖິ່ນພິເສດສຳລັບການອ່ານ ແລະ ການຂຽນ. ຖ້າບໍ່ມີປຶ້ມອ່ານ, ທ່ານອາດສາມາດສ້າງປຶ້ມຂອງທ່ານເອງທີ່ນຳສະເໜີບົດເລື່ອງ ແລະ ນິທານທ້ອງຖິ່ນ. ແນວຄິດອື່ນໆ ປະກອບມີດັ່ງຕໍ່ໄປນີ້:

ສະເໜີໃຫ້ເດັກນ້ອຍເລົ່າເລື່ອງກ່ຽວກັບການສັງເກດໂລກອ້ອມຕົວຂອງເຂົາ ແລະ ກ່ຽວກັບເຫດການຕ່າງໆໃນຊີວິດຂອງເຂົາ ເຊັ່ນ ມື້ພັກຮຽນ ຫລື ງານບຸນ/ງານສະເຫລີມສະຫລອງໃດໜຶ່ງໃນຄອບຄົວ. ພວກເຂົາຈະໄດ້ຮຽນວິທີລຳດັບເຫດການຕ່າງໆ ໃນເລື່ອງເລົ່າ ກໍຄື ວິທີປ່ຽນແບບພາສາທີ່ເຂົາໃຊ້ຢູ່ຂຶ້ນ ກັບຈຸດປະສົງຂອງບົດເລື່ອງ ແລະ ຜູ້ຟັງ.

- ການສ້າງສະພາບແວດລ້ອມ “ການອ່ານ ແລະ ການຂຽນ” ຂອງຫ້ອງຮຽນ ໂດຍການຕິດໂປສະເຕີຕົວອັກສອນ, ຮູບພາບ, ຖ້ອຍຄຳຕ່າງໆ ແລະ ຂໍ້ມູນຄວາມຮູ້ອື່ນໆ. ສິ່ງເຫລົ່ານີ້ອາດມາຈາກບົດເລົ່າເລື່ອງ, ບົດຮຽນ ຫລື ງານຂອງນັກຮຽນເອງ. ທ່ານຍັງສາມາດຕິດປ້າຍສິ່ງຂອງຕ່າງໆອ້ອມຫ້ອງ. ຖ້າມີທີ່ຫວ່າງຢູ່ຝາ ທ່ານກໍສາມາດແຂວນຕົວອັກສອນ, ຖ້ອຍຄຳ ແລະ ຮູບພາບໃສ້ເຊືອກພາຍໃນຫ້ອງຮຽນ. ຖ້າມີໜັງສືພິມທ້ອງຖິ່ນ, ບົດຄວາມ, ຄຳພາດຫົວ ຂອງໜັງສືພິມ ແລະ ຮູບພາບຕ່າງໆ ກໍສາມາດວາງສະແດງເພື່ອສາທິດການໃຊ້ພາສາທີ່ ແຕກຕ່າງກັນ.
- ບູລະນາການ ການຝຶກປະຕິບັດດ້ານພາສາກັບວິຊາຮຽນອື່ນໆ. ຕົວຢ່າງ: ເມື່ອເດັກໄດ້ພັດທະ ນາທັກສະໃນການຂຽນແລ້ວ, ເຂົາກໍສາມາດຂຽນບັນຍາຍກ່ຽວກັບພືດຊະນິດຕ່າງໆ ຫລື ແຫລ່ງທີ່ມາຂອງນ້ຳສະອາດສຳລັບບົດຮຽນວິທະຍາສາດ. ຊວນເຊີນພວກເຂົາຂຽນໂຈດບັນຫາໃຫ້ແກ່ກັນໃນວິຊາຄະນິດສາດ ຫລື ເຂົາສາມາດ ທີ່ຈະຂຽນກ່ຽວກັບວິທີແກ້ໂຈດ ຄຳຖາມ ທາງວິທະຍາສາດ.
- ແນະນຳນັກຮຽນຫ້ອງໃຫຍ່ ໃຫ້ສົນທະນາອະພິປາຍ ໃນກຸ່ມນ້ອຍ ລວມທັງນຳເອົາເລື່ອງຕ່າງໆ ຈາກຫ້ອງຮຽນມາສ້າງເປັນລະຄອນ ເພື່ອທີ່ຈະໃຫ້ໂອກາດເຂົາວາງກອບແນວຄິດ ໃນພາສາຂອງເຂົາເອງ. ໂດຍສະຖານະການຂອງການຫລິ້ນບົດບາດສົມມຸດ ຈາກໂຮງຮຽນ ຫລື ໂດຍໃຊ້ຕຸກກະຕາ ເພື່ອຊີ້ໃຫ້ເຫັນປະເດັນບັນຫາສັງຄົມ ເຊັ່ນ ການຂົ່ມເຫັງກັນ, ເດັກຍັງຈະໄດ້ພັດທະນາ “ອາລົມຈິດທີ່ດີ” ຂອງເຂົາ ແລະ ວິທີທີ່ຈະດຳເນີນການກັບສະຖານະການທີ່ ຫຍຸ້ງຍາກໄດ້ດີ.
- ໃຫ້ໂອກາດແກ່ຜູ້ຮຽນທັງຫມົດເພື່ອຂຽນ, ເພື່ອແລກປ່ຽນຂໍ້ຂຽນໂດຍອ່ານດັງໆ ໃຫ້ເພື່ອນຟັງ ແລະ ເວົ້າລົມກັນກ່ຽວກັບການຂຽນຂອງພວກເຂົາ. ນັກຂຽນທັງຫມົດໄດ້ຮັບຜົນປະໂຫຍດ.
- ຈາກການອ່ານຜົນງານຂອງຕົນໃຫ້ຕົວເອງຟັງ ໃນຂະນະທີ່ ພວມສ້າງຜົນງານຢູ່ ກໍຄື ການອ່ານ ໃຫ້ຜູ້ອື່ນໆຟັງ. ການເຮັດວຽກໃນ “ຄູ່ຂຽນ” ກໍສາມາດຊ່ອຍນັກຮຽນຂອງທ່ານ

ພະຍາຍາມ ໃຊ້ຄວາມຄິດ ແລະ ຕັດສິນໃຈທີ່ຈະ ໃຊ້ຄຳສັບທີ່ດີທີ່ສຸດ. ນັກຂຽນທຸກຄົນ ຍົກເວັ້ນຜູ້ຫາກໍ່ຮຽນຂຽນ (ເດັກນ້ອຍທີ່ຫາກໍເລີ່ມຂຽນ) ສາມາດໄດ້ປະໂຫຍດຈາກການບັນນາທິການກວດ ແກ້ຈາກກຸ່ມເພື່ອນ ເຊິ່ງພວກເຂົາຈະອ່ານ, ແລກປ່ຽນການຕຳນິວິຈານທີ່ສ້າງສັນ ແລະ ວາງ ແຜນທົບທວນເພື່ອປັບປຸງ.

ພິເສດສຳລັບການສອນຂຽນ

ການສອນຂຽນມີຄວາມສຳຄັນແລະຄວາມລຳຍາກ. ຖ້າທ່ານໃຫ້ໂອກາດເດັກຂອງ ທ່ານ ຂຽນ ເລື້ອຍໆ ແລະ ໂອກາດທົບທວນປັງປຸງໃຫ້ການຂຽນດີຂຶ້ນ. ນັກຂຽນໜຸ່ມທັງຍິງ ແລະ ຊາຍ ສາມາດ ສະແດງຕົນໃນການຂຽນ ກ່ຽວກັບ ຫົວຂໍ້ທີ່ສຳຄັນສຳລັບເຂົາ. ສິ່ງເຫລົ່ານີ້ ສາມາດ ປະກອບມີເລື່ອງຄອບຄົວຂອງເຂົາ, ເຫດການພິເສດໃນຊຸມຊົນ, ຫົວຂໍ້ກ່ຽວກັບສັງຄົມສາດ ແລະ ອື່ນໆ.

ການຂຽນຂອງເດັກຄວນມີຈຸດປະສົງສະເພາະ ແລະ ຜູ້ອ່ານ. ເດັກມັກຈະຂຽນເລື່ອງ ໃຫ້ ພຽງແຕ່ຄູ, ແຕ່ໃນຊີວິດຈິງ ພວກເຮົາໃຊ້ການຂຽນສຳລັບຜູ້ອ່ານຜູ້ຟັງທີ່ແຕກຕ່າງ ຫລາກຫລາຍ. ພວກເຮົາຕ້ອງປ່ຽນ ຮູບແບບວິທີຂຽນຂອງເຮົາທີ່ສອດຄ່ອງກັບຈຸດປະສົງ ແລະ ຜູ້ອ່ານຜູ້ຟັງ ເຊັ່ນຕົວຢ່າງ : ລາຍການ, ຈົດໝາຍ ຫລື ບັນທຶກສຳລັບເຮົາເອງ ຫລື ແຜ່ນໂປສະເຕີ ຫລື ເລື່ອງເລົ່າສຳລັບເດັກນ້ອຍ. ນີ້ຄືລັກສະ ນະການຂຽນທີ່ມີຄວາມໝາຍ. ນີ້ຄື ທົບພິເສດອີກ 2-3 ຂໍ້ :

- ເຊີນຊວນນັກຂຽນລຸ້ນເຍົາຂຽນຢ່າງອິດສະຫລະ ໂດຍບໍ່ຕ້ອງກັງວົນກ່ຽວກັບຄວາມ ຖືກຕ້ອງ. ເດັກທີ່ຫາກໍ່ຮຽນຂຽນກໍສາມາດສ້າງໂຄງສ້າງ ແລະ ການສະແດງອອກ ທາງພາສາ ແມ່ນວ່າ ເຂົາອາດໃຊ້ການສະກົດອັກສອນຈາກຈິນຕະນາການ ທີ່ບໍ່ຖືກ ປານໃດ ແລະ ໃຫ້ວັກຕອນທີ່ແປກໆກໍຕາມ. ການສະກົດຕົວອັກສອນແບບຈິນຕະ ນາການ ຫລື ຂຽນຂຶ້ນເອງແບບຜິດໆ ຖືກໆເປັນສິ່ງປົກກະຕິ ໃນການພັດທະນາການ ຂຽນ. ເດັກຈະ "ໄດ້ຍິນ" ແລະ ຈະພະຍາຍາມຕັດສິນໃຈວ່າຖ້ອຍຄຳໃດ ອາດສາ ມາດມີໜ້າຕາຄືແນວໃດ ພວກເຂົາຈຳເປັນຕ້ອງໃຊ້ຍຸດທະສາດຂອງເຂົາເອງກ່ອນ. ເດັກຕ້ອງພາກພຽນພະຍາຍາມ ແລະ ສະກົດຄຳອອກມາ ໃຫ້ໄດ້ດ້ວຍຕົວເອງ. ໃນ ຂະນະດຽວກັນ ເຂົາຄວນຈະຮຽນຮູ້ວິທີຈື່ຈຳ ແລະ ວິທີ ໃຊ້ວັດຈະນານຸກົມ.
- ຄວນຮຽນຖ້ອຍຄຳຕ່າງໆ ໃນບໍລິບົດ ບໍ່ວ່າຈະເປັນພາບຂອງຖ້ອຍຄຳ ເຊັ່ນ "ເຮືອນ ຫລື ຫມາກບານ" ຫລືການໃຊ້ຖ້ອຍຄຳຢູ່ພາຍໃນປະໂຫຍກ ເຊັ່ນ "ເຮືອນສີເຫລືອງ" ຫລື "ຫມາກບານສີມ່ວງ".
- ທ່ານສາມາດສອນເດັກນ້ອຍໃຫ້ສະກົດຄຳດ້ວຍຫລາຍວິທີ ເຊັ່ນ ສະກົດຄຳໃຫ້ອອກ ສຽງດັງໆ, ສະກົດເກມການຫລິ້ນຕ່າງໆ ແລະ ເກມຕໍ່ຄຳ. ຢ່າງໃດກໍຕາມ, ເມື່ອພວກ ເຂົາຂຽນ ແລະ ເລີ່ມກັງວົນກັບການສະກົດຄຳ ແລະ ການໃຫ້ວັກຕອນທີ່ຖືກຕ້ອງ,

ພວກເຂົາອາດມີຄວາມຫຍຸ້ງຍາກ ໃນການສ້າງການພົວພັນ ທີ່ເລິກເຊິ່ງກວ່າກັບ ພາສາ. ທ່ານຈຳເປັນຕ້ອງສັງເກດ ແລະ ຂຽນອອກບັນຫາຕ່າງໆ ໃນການຂຽນຂອງ ເດັກ ບໍ່ແມ່ນຈະເບິ່ງແຕ່ ການສະກົດຄຳ ທີ່ຖືກຕ້ອງ. ຈາກນັ້ນ ທ່ານກໍສາມາດທີ່ຈະ ວິນິໄສຄວາມຫຍຸ້ງຍາກຂອງເຂົາ ແລະ ຊ່ອຍເຫລືອເຂົາສະເພາະຢ່ງເຂດນັ້ນ ເຊັ່ນ ວິທີໃຊ້ຄຳຄຸນນາມ ທີ່ມີປະສິດທິຜົນ ຫລື ວິທີສ້າງ ການປຽບທຽບທີ່ມີຄວາມຫມາຍ (ຄວາມຄ້າຍຄືກັນ). ເປົ້າຫມາຍຂອງການຂຽນ ແມ່ນເພື່ອການສື່ສານແນວຄິດ ໃຫ້ ໄດ້ດີເພື່ອທີ່ຈະໃຫ້ທຸກຄົນເຂົ້າໃຈມັນ. ກົດເກນໃຫຍ່ໆ ສຳລັບ ຄູໃນການສອນການ ຂຽນແມ່ນຕ້ອງສ້າງໂອກາດ ສຳລັບການສື່ສານທີ່ມີຄວາມຫມາຍເຊັ່ນດັ່ງຕ່ໄປນີ້ :

- ເຊີນຊວນຜູ້ຮຽນທີ່ໜຸ່ມນ້ອຍໃຫ້ອ່ານຂຽນທວາຍບົດເລື່ອງຕ່າງໆໃຫ້ "ຜູ້ຮັບຂຽນ" ຂຽນ ຕາມອາດຈະເປັນທ່ານເອງ, ຄູ, ອາສາສະໝັກຈາກຊຸມຊົນ ຫລື ນັກຮຽນ ທີ່ເປັນລຸ້ນ ອ້າຍ. (ໃຫ້ເຕືອນຜູ້ຮຽນອົດທົນ ແລະ ເວົ້າຊ້າໆກັບຜູ້ທີ່ພວມຂຽນ). ຈາກນັ້ນຜູ້ເລົ່າ/ ອ່ານກໍສາມາດທີ່ຈະວາດພາບສະແດງບົດເລົ່າເລື່ອງຂອງເຂົາ. ການຝຶກປະຕິບັດນີ້ ຈະສ້າງສະພາບລະຫວ່າງ ການເວົ້າ ແລະ ການຂຽນ. ມັນຍັງເປັນກົດຈະກຳທີ່ ພວກເຮົາສາມາດ ຈະຊ່ອຍເດັກທີ່ສາມາດເຫັນ ທີ່ຈະຮຽນກ່ຽວກັບຜູ້ບໍ່ສາມາດມອງ ເຫັນ.
- ບອກໃຫ້ຜູ້ຮຽນຂຽນກ່ຽວກັບເລື່ອງຊີວິດ ແລະ ປະສົບການຂອງພວກເຂົາ ບໍ່ວ່າຈະ ເປັນການໄປຢ້ຽມຢາມພໍ່ຕູ້ແມ່ຕູ້ ຫລື ປະສົບການໃດໜຶ່ງຢູ່ນອກໂຮງຮຽນ. ຜູ້ຮຽນ ຂຽນໃໝ່ຈະຂຽນໄດ້ດີທີ່ສຸດ ເມື່ອຂຽນກ່ຽວກັບສິ່ງທີ່ພວກເຂົາຮູ້ດີ.
- ໃຫ້ຈັດຕັ້ງນຳພາການຂຽນໃນໄລຍະສັ້ນໆ. ສຳລັບເດັກທີ່ມີອາຍຸ ຕ່ຳກວ່າ 8-9 ປີ ອາດຈະ ເມື່ອຍຫລາຍທີ່ຈະນັ່ງຈັບສໍ ຫລື ສໍຂາວເພື່ອຈະຂຽນໜັງສື ໃນຂະນະທີ່ ຕ້ອງຄິດຄົ້ນຫາຂໍ້ ຄວາມທີ່ພວກເຂົາຢາກສື່ສານນຳອີກ. ການໃຫ້ຂຽນເລື້ອຍໆ ແລະ ໃຊ້ເວລາສັ້ນໆຈະໄດ້ ຜົນດີກວ່າຫລາຍທີ່ຈະພະຍາຍາມໃຫ້ຂຽນເປັນໄລຍະຍາວ.
- ເປີດໂອກາດໃຫ້ແກ່ການຂຽນຊະນິດຈິນຕະນາການທຸກຢ່າງ. ເມື່ອຜູ້ຮຽນທີ່ມີອາຍຸ ຫລາຍຂຶ້ນຂຽນກ່ຽວກັບວິທີທີ່ເຂົາເຄີຍແກ້ໂຈດບັນຫາຄະນິດສາດ ຫລື ວິທະຍາສາດ ຫລື ກ່ຽວກັບຜົນກະທົບຂອງສະພາບອາກາດຕ່ຊີວິດຂອງຄົນ ໃນຄອບຄົວຂອງເຂົາ ມີຄືແນວໃດ ນັ້ນ ຫມາຍວ່າ ເຂົາກຳລັງໃຊ້ການຂຽນ ເປັນເຄື່ອງມືທີ່ມີປະສິດທິຜົນ.
- ພິມສິ່ງທີ່ຂຽນເພື່ອເຮັດໃຫ້ມັນມີຄວາມຫມາຍ. ບົດຂຽນຂອງ ເດັກຍິງ ແລະ ເດັກ ຊາຍສາມາດ " ພິມເຜີຍແຜ່ " ຕິດໃສ່ຝາຫ້ອງ ຫລື ເຮັດເປັນປຶ້ມແບບງ່າຍໆ. ມັນຍັງ ສາມາດນຳໄປແລກປ່ຽນກັບຜູ້ຮຽນຫ້ອງອື່ນ, ກັບຄອບຄົວ, ກັບຊຸມຊົນ ແລະ ຫມູ່ ເພື່ອນອີກດ້ວຍ. ເມື່ອຜູ້ຮຽນຂຽນໜັງສືເຖິງຜູ້ນຳຊຸມຊົນ ຫລື ຜູ້ມາຢ້ຽມຢາມບໍ່ວ່າ ຈະເປັນການຖາມບັນຫາ ຕ່າງໆ, ຂໍສະເໜີຄຳຄິດຄຳເຫັນ ຫລື ພຽງສະແດງ ຄຳຂອບໃຈ ແລະ ຊົມເຊີຍໃນການ ມາຢ້ຽມຢາມແບບງ່າຍໆນັ້ນ ພວກເຂົາຈະມີໂອ

ກາດທີ່ຈະຂຽນ ກ່ຽວກັບສິ່ງຕ່າງໆ ທີ່ສຳຄັນຕໍ່ເຂົາ ແລະ ຈະມີຈຸດປະສົງ ແລະ ຜູ້ອ່ານຕົວຈິງ.

ກິດຈະກຳສະທ້ອນກັບ: ການສອນພາສາຢ່າງມີຄວາມຫມາຍ

ໃຫ້ຄິດກ່ຽວກັບການສອນຕົວຈິງຂອງ ທ່ານ ໃນປັດຈຸບັນ ແລະ ເດັກນັກຮຽນຂອງທ່ານ :

- ວິທີສອນພາສາແບບໃດທີ່ໄດ້ຮັບຄວາມສົນໃຈໜ້ອຍທີ່ສຸດໃນຫ້ອງຂອງທ່ານ?
- ທ່ານຈະສາມາດປັບປຸງສະຖານະການນີ້ຢ່າງໃດ ?
- ທ່ານໃຫ້ໂອກາດເດັກເພື່ອເວົ້າຮ່ວມກັນເປັນຄູ່ ແລະ ສົນທະນາໃນກຸ່ມ 4 ຄົນບໍ່ ?
- ທ່ານສາມາດເຮັດໃຫ້ການຮຽນຮູ້ ແລະ ນຳໃຊ້ພາສາໃຫ້ເປັນໜ້າສົນໃຈ, ສອດຄ່ອງ ແລະ ມີຄວາມຫມາຍຫລາຍຂຶ້ນໄດ້ຢ່າງໃດ ?

ຄຳຖາມ

1. ການຮຽນຮູ້ເພື່ອຊີວິດແມ່ນແນວໃດ? (ຖາມຫລັງຈາກປະຕິບັດກິດຈະກຳຂອງ3.1).
2. ການສ້າງສະພາບແວດລ້ອມການຮຽນຮູ້ທີ່ເປັນເພື່ອນມິດມີຄວາມໝາຍແນວໃດ?
3. ເພື່ອຮັບປະກັນໂອກາດເທົ່າທຽມກັນ (ຍິງ-ຊາຍ) ຢູ່ໃນໂຮງຮຽນຄວນເຮັດແນວໃດ?
4. ການຮຽນຮູ້ແບບຕັ້ງໜ້າ ແລະ ແບບມີສ່ວຮ່ວມມີແນວໃດແດ່?
5. ມີວິທີການອັນໃດແດ່? ທີ່ຈະເຮັດໃຫ້ ຄະນິດສາດ,ວິທະຍາສາດ ແລະ ພາສາມີຄວາມໝາຍສຳຄັນຕໍ່ຄົນເຮົາ.

ພາກທີ II

ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ບົດທີ 3

ການວາງແຜນສຳລັບການສອນ ແລະ ການຮຽນຮູ້

ຢູ່ຫລາຍໆປະເທດ ແລະ ໂດຍສະເພາະຢູ່ເຂດຊົນນະບົດ, ຄູອາດຈະພົບຄວາມຫຍຸ້ງຍາກ ທ້າທາຍໃນວຽກຂອງຕົນທີ່ສຸດ. ເຖິງວ່າພວກເຮົາຈະອາດສາມາດຕອບສະໜອງໄດ້ຄວາມສົນໃຈ ຂອງເດັກກໍຕາມ, ພວກເຮົາຍັງຈຳເປັນຕ້ອງມີການຈັດຕັ້ງທີ່ດີ.

ພວກເຮົາຈຳເປັນຕ້ອງມີການ**ບໍລິຫານຈັດການ** ການຮຽນ-ການສອນທີ່ດີ. ເຄື່ອງມືນີ້ ຈະຊ່ອຍ ເຫລືອ ທ່ານ ດ້ານແນວຄວາມຄິດຫລາຍຢ່າງກ່ຽວກັບການວາງແຜນ ເພື່ອສິດສອນ ແລະ ຮຽນຮູ້, ການໃຊ້ຊັບພະຍາກອນທີ່ມີໃຫ້ເກີດປະໂຫຍດສູງສຸດ ລວມທັງການບໍລິຫານຈັດການຫ້ອງ ຮຽນທີ່ມີລັກສະນະຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ເມື່ອມີເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ.

3.1 ກິດຈະວັດປະຈຳວັນຂອງຫ້ອງຮຽນ

ກິດຈະກຳປົກກະຕິຂອງຫ້ອງຮຽນຈະຊ່ອຍເດັກເລີ່ມຕົ້ນຮ່ຳຮຽນໄດ້ໄວ ແລະ ມີຄວາມ ໝາຍນັບແຕ່ໄລຍະເລີ່ມຕົ້ນຂອງການເຂົ້າໂຮງຮຽນ. ເດັກຄວນເຫັນດີເຫັນພ້ອມກ່ຽວກັບລະບຽບ ແລະ ກິດຈະວັດປະຈຳ ແລະ ຍິ່ງເປັນການດີ ຖ້າພວກເດັກເປັນຜູ້ຈັດຕັ້ງປະຕິບັດເອງ. ຕົວຢ່າງ: ກຸ່ມນັກຮຽນໃດໜຶ່ງ ຫລື ຄະນະຫ້ອງອາດສາມາດເປັນຜູ້ຮັບຜິດຊອບການລົງທະບຽນ / ຮຽກຊື່ ແລະ ລາຍງານການມາ - ການຂາດໂຮງຮຽນຕໍ່ຄູ.

ເວລາພັດທະນາກິດຈະວັດປະຈຳວັນກັບເດັກ, ສິ່ງສຳຄັນກໍຄືຕ້ອງອະທິບາຍ ແລະ ຕັດ ສິນໃຈກ່ຽວກັບ: (1) ຈະເຮັດຫຍັງ; (2) ໃຜຈະເປັນຜູ້ເຮັດ; (3) ຈະເຮັດເມື່ອໃດ ແລະ (4) ຍ້ອນ ເຫດຜົນໃດ ການເຮັດກິດຈະກຳປະຈຳວັນນີ້ ຈຶ່ງມີຄວາມສຳຄັນ. ສິ່ງທີ່ຈະກ່າວຕໍ່ໄປນີ້ ແມ່ນບາງ ແນວຄວາມຄິດ ກ່ຽວກັບ ກິດຈະວັດປະຈຳວັນທີ່ທ່ານສາມາດຈັດຕັ້ງປະຕິບັດ ກັບເດັກນັກຮຽນ ຂອງທ່ານ:

- ວຽກໃດ ທີ່ພວກເຂົາຈຳເປັນຕ້ອງເຮັດໃນແຕ່ລະຄັ້ງ ໂດຍສະເພາະສຳລັບເດັກທີ່ມາ ຊ້າຍ້ອນວ່າ ຕ້ອງເດີນທາງໄກ, ລວມທັງໃນສ່ວນຂອງເດັກທີ່ພວມລໍຖ້າຈະຮຽນຮູ້;
- ປຶ້ມແບບຮຽນ ແລະ ສື່ການສອນຄວນແຈກຢາຍ, ເກັບຄືນ ແລະ ເກັບຮັກສາຢ່າງໃດ, ແລະ ໃຜຄວນເປັນຜູ້ຮັບຜິດຊອບກິດຈະກຳນີ້ (ບາງເທື່ອອາດປ່ຽນຜຽນກັນຮັບຜິດຊອບ ໃນໝູ່ເດັກແຕ່ລະ ຄົນ, ກຸ່ມເດັກຍິງກໍຄືເດັກຊາຍ ຫລື ຈັດເປັນກຸ່ມຮັບຜິດຊອບ);

- ເດັກຈະສາມາດຊ່ອຍເຫລືອກັນແນວໃດເມື່ອມີຄວາມຈຳເປັນ ແລະ ເມື່ອຄູບໍ່ຫວ່າງ;
- ຈະໃຫ້ເດັກເຮັດຫຍັງເມື່ອເຂົາເຮັດສຳເລັດກິດຈະກຳໃດໜຶ່ງແລ້ວ;
- ຈະໃຫ້ຄູເອົາໃຈໃສ່ແບບບໍ່ມີການລົບກວນຄູຄືແນວໃດ;
- ລະດັບສຽງບົນແຊວທີ່ພໍຮັບໄດ້ແມ່ນແນວໃດ; ຈະເຄື່ອນໄຫວ/ເຄື່ອນທີ່ ໃນຫ້ອງຮຽນ ໂດຍບໍ່ມີ ການລົບກວນແນວໃດ; ແລະ ຈະມີວິທີອອກຈາກຫ້ອງຮຽນແນວໃດ.

ເດັກຄວນຈະພັດທະນາບາງລະບຽບວິໄນເຫລົ່ານີ້ຢ່າງຈິງຈັງ ຍ້ອນວ່າມັນຈະເປັນທີ່ຍອມຮັບ ເພື່ອປະຕິບັດຖ້າເດັກໄດ້ເຂົ້າຮ່ວມການສ້າງຕັ້ງລະບຽບວິໄນດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ກິດລະບຽບ ບາງຂໍ້ອາດຈະບໍ່ສາມາດຕ່ລອງໄດ້ ໂດຍສະເພາະ ຂໍ້ທີ່ມີຄວາມຕັ້ງໃຈທີ່ຈະປົກປ້ອງເດັກ ຕົວຢ່າງ: ກິດລະບຽບ ກ່ຽວກັບການເຂົ້າອອກຫ້ອງຮຽນ ຫລື ກິດລະບຽບກ່ຽວກັບການຕິດຕໍ່ພົວພັນ ກັບຄູກ່ອນອອກນອກພື້ນທີ່ໂຮງຮຽນ ໂດຍສະເພາະຖ້າພວກເຂົາມີບຸກຄົນນອກທີ່ບໍ່ແມ່ນ ພໍ່ແມ່ ຜູ້ປົກຄອງພາໄປ.

3.2 ຄວາມຮັບຜິດຊອບຂອງເດັກ

ເດັກທຸກຄົນຄວນເຂົ້າຮ່ວມໃນການຊ່ອຍເຫລືອໜ້າທີ່ວຽກງານຂອງຫ້ອງຮຽນ.ດ້ວຍວິທີດັ່ງ ກ່າວນີ້, ທ່ານຈະໄດ້ຊ່ອຍຕົວເອງ ໃນການບໍລິຫານຈັດການຫ້ອງຮຽນ ໃນຂະນະດຽວກັນກໍເປັນ ການສອນຄວາມຮັບຜິດຊອບໃຫ້ນັກຮຽນຂອງທ່ານ. ໃນນີ້ມີບາງຕົວຢ່າງຂອງຄວາມຮັບຜິດຊອບ ຕ່າງໆ ທີ່ທ່ານສາມາດມອບໝາຍໃຫ້ເດັກເປັນຜູ້ເຮັດ:

- ເປັນຄູສອນເດັກທີ່ນ້ອຍກວ່າ ຫລື ເດັກທີ່ອາດມີຄວາມຕ້ອງການຊ່ອຍເຫລືອພິເສດ ໃນ ການຮຽນຮູ້;
- ເປັນຄະນະຫ້ອງ/ໜ່ວຍ/ກຸ່ມ ຫລື ເປັນສະມາຊິກຄະນະຮັບຜິດຊອບໃດໜຶ່ງທີ່ ຮັບປະກັນ ເຮັດໃຫ້ກິດຈະກຳການຮຽນຮູ້ ຫລື ກິດຈະວັດປະຈຳວັນສຳເລັດຜົນ ແລະ ເປັນຜູ້ທີ່ຈະ ລາຍງານສິ່ງທີ່ໄດ້ ຮຽນຮູ້ ຫລື ເຮັດສຳເລັດແລ້ວ;
- ເປັນສະມາຊິກຂອງຄະນະຮັບຜິດຊອບດ້ານສຸຂະອະນາໄມ ເຊິ່ງຜູ້ທີ່ຈະຮັບປະກັນວ່າ: ມີ ນ້ຳ ແລະ ສະບູ ຫລື ນ້ຳດັ່ງ ສຳລັບລ້າງມື ແລະ ນ້ຳສະອາດດື່ມ;
- ເປັນຜູ້ລົງທະບຽນ ແລະ ບັນທຶກການມາໂຮງຮຽນໃສ່ແຜນພູມ; ແລະເກັບກຳລວບລວມ ແລະ ບັນທຶກຂໍ້ສະເໜີແນະຕ່າງໆຈາກກ່ອງສະເໜີຄຳເຫັນຂອງ ຫ້ອງຮຽນ.


ການເລືອກຄວາມຮັບຜິດຊອບຕ່າງໆ ເພື່ອຈະມອບໝາຍໃຫ້ເດັກຄົນໃດໜຶ່ງເຮັດ ແມ່ນ ຂຶ້ນກັບອາຍຸ ແລະ ລະດັບຄວາມເປັນຜູ້ໃຫຍ່ຂອງເຂົາ. ເຖິງຢ່າງໃດກໍຕາມ, ບໍ່ແມ່ນຈະມີແຕ່ເດັກ ທີ່ສະຫລາດທີ່ສຸດ ຫລື ເດັກທີ່ “ສະດຸ້ງໄວ” ທີ່ສຸດຄວນຈະໄດ້ຮັບຜົນປະໂຫຍດ ຈາກການມອບ ໝາຍຄວາມຮັບຜິດຊອບທີ່ແທ້ຈິງ. ເດັກທຸກຄົນໃນຫ້ອງຮຽນຂອງທ່ານຄວນ ເຂົ້າມີສ່ວນຮ່ວມ ບໍ່ຂຶ້ນກັບວ່າ ເຂົາຈະເປັນ ເດັກຍິງ ຫລື ຊາຍ, ຄວາມສາມາດໃນການຮຽນຮູ້ ຫລື ພື້ນຖານທາງ ວັດທະນະທຳ. ຍິ່ງໄປກວ່ານັ້ນ, ພວກເຮົາ ຍັງຈຳເປັນຕ້ອງລະມັດລະວັງ ບໍ່ໃຫ້ຊຸກຍູ້ຮູບ ແບບເດີມ

ຂອງບົດບາດຍິງຊາຍ ເຊັ່ນ ບອກໃຫ້ ເດັກຍິງ ໄປຫົດນ້ຳຕົ້ນໄມ້, ສ່ວນຜູ້ຊາຍໃຫ້ໄປ ຍ້າຍໂຕະຕັ່ງ. ເມື່ອໃຫ້ການສະໜັບສະໜູນ ທີ່ຖືກຕ້ອງ, ເດັກທຸກຄົນຈະສາມາດເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກທຸກວຽກກິດຈະກຳ ແລະ ກິດຈະວັດ ທັງຫມົດຂອງຫ້ອງຮຽນ.

3.3 ການວາງແຜນການສອນ

ເພື່ອຈະນຳໃຊ້ເວລາຂອງທ່ານ ແລະ ເວລາສຳລັບການຮຽນຮູ້ໃຫ້ໄດ້ດີທີ່ສຸດ, ບົດຮຽນ/ບົດສອນຕ່າງໆ ຈຳເປັນຕ້ອງວາງແຜນເປັນຢ່າງດີ. ແນ່ນອນ, ໃນຕອນຕົ້ນຈະໃຊ້ເວລາ, ແຕ່ມັນເປັນທັກສະທາງ ວິຊາຊີບ ທີ່ສຳຄັນສຳລັບຄູທຸກຄົນ ແລະ ເປັນສິ່ງປະຢັດເວລາໃນໄລຍະຍາວດ້ວຍ.

ກອບຂອງວຽກໜຶ່ງທີ່ທ່ານສາມາດໃຊ້ສຳລັບການວາງແຜນແມ່ນ ສາມຫລ່ຽມຫລັກສູດ



ໃນກອບຂອງວຽກນີ້, **ເນື້ອໃນ (Content)** ຫມາຍເຖິງຫົວຂໍ້ບົດຮຽນ ທີ່ໄດ້ຖືກກຳນົດໄວ້ຢູ່ໃນເອກະສານ ຫລັກສູດແຫ່ງຊາດຂອງທ່ານ. ເຖິງຢ່າງໃດກໍຕາມ, ໂດຍສະເພາະຫ້ອງຮຽນທີ່ບັນຈຸເດັກທີ່ມີພື້ນ ຖານ ແລະ ຄວາມສາມາດທີ່ແຕກຕ່າງຫລາກຫລາຍນັ້ນ, ຫົວຂໍ້ດັ່ງກ່າວຈຳເປັນຕ້ອງມີຄວາມຫມາຍຕໍ່ເດັກ ແລະ ຖືກປັບໃຫ້ເຫມາະສົມສອດຄ່ອງກັບຊຸມຊົນທ້ອງຖິ່ນທີ່ເດັກອາໄສຢູ່.

ຂະບວນການ (Process) ແມ່ນວິທີທີ່ຈະສິດສອນເນື້ອໃນ. ສິ່ງດັ່ງກ່າວອາດ ກ່ຽວຂ້ອງກັບການໃຊ້ວິທີການສິດສອນທີ່ຫລາກຫລາຍ ເພື່ອຕອບຮັບຄວາມຕ້ອງການຂອງ ເດັກທີ່ມີວິທີຮຽນຮູ້ແຕກຕ່າງກັນ ຫລື ເພື່ອເຮັດໃຫ້ເວລາທີ່ມີ ເພື່ອສິດສອນ ແລະ ຮຽນຮູ້ ໄດ້ເກີດປະໂຫຍດສູງສຸດ (ໃຫ້ເບິ່ງ ເພື່ອນສອນເພື່ອນຂ້າງລຸ່ມ).

ສະພາບແວດລ້ອມ (Environment) ຈະປະກອບດ້ວຍສິ່ງແວດລ້ອມກາຍະພາບ - ລວມທັງ ຊັບພະຍາກອນການຮຽນຮູ້ສຳລັບບົດຮຽນທີ່ອາດມີໄວ້ຢູ່ມຸມຮຽນຮູ້ ແລະ ສິ່ງແວດລ້ອມຈິດຕະ-ສັງຄົມດັ່ງ ຕົວຢ່າງ: ການເນັ້ນໃສ່ການສ້າງຄວາມພາກພູມໃຈໃນຕົນເອງ ໂດຍຜ່ານກິດຈະກຳກຸ່ມແບບຮ່ວມມື.

ກິດຈະກຳຕ່າງໆ : ເລີ່ມບົດຮຽນດ້ວຍ "ເກມຮຽກຊື່" ເພື່ອເຮັດໃຫ້ເດັກ ຈື່ຈຳຊື່ ຂອງກັນແລະກັນ ໃນຕົ້ນ ປີຮຽນ. ກິດຈະກຳນີ້ຈະຊ່ອຍສ້າງຄວາມສາມະຄີໃນຫ້ອງຮຽນ. ອີກກິດຈະກຳໜຶ່ງ ເອີ້ນຊື່ວ່າ "ເກມພອນສະຫວັນ". ໃຫ້ເດັກເຮັດວຽກເປັນຄູ່ ໂດຍໃຫ້ລົມກັນ ແລະ ຖາມກັນ. ຫລັງຈາກສາມ ສີ່ນາທີ, ໃຫ້ພວກເຂົາຮຽນ ສິ່ງທີ່ເຂົາໄດ້ຄົ້ນພົບໃນຕົວຂອງຂາຄູ່ທີ່ໄດ້ສົນທະນາກັນ ແລ້ວລາຍ ງານໃຫ້ຫ້ອງຟັງກ່ຽວກັບຄຸນນະພາບ ຫລື "ພອນສະຫວັນ" ທີ່ຂາຄູ່ມີ. ພວກເຂົາ ສາມາດລາຍງານ ໃນລັກສະນະນີ້: "ເພື່ອນຂອງ ຂ້ອຍຊື່ວ່າ ມາລີ ແລະ ລາວມີພອນສະຫວັນຂອງຄວາມຮູ້ສຶກຕະ ຫລົກຂີບຂັນ" "ເພື່ອນຂອງ ຂ້ອຍຊື່ວ່າ ໂຈ ແລະ ລາວເປັນຄົນທີ່ມີພອນສະຫວັນ ໃນການເປັນ ນັກຟັງທີ່ດີ". ກິດຈະກຳ ນີ້ສະແດງ ໃຫ້ເຫັນວ່າແຕ່ລະຄົນສາມາດນຳສິ່ງໃດໜຶ່ງມາໃນຫ້ອງຮຽນ ແລະ ພອນສະຫວັນ/ ຄຸນສົມບັດ ເຫລົ່ານີ້ມີຄຸນຄ່າ.

ເດັກຈະຮຽນໄດ້ດີທີ່ສຸດ ໃນເມື່ອພວກເຂົາຫ້າວຫັນ ແລະ ໄດ້ຄົ້ນຄິດ. ພວກເຂົາຍັງສາມາດ ຮຽນໄດ້ດີອີກ ເມື່ອກິດຈະກຳຕ່າງໆຕັ້ງຢູ່ບົນປະສົບການ ແລະ ສະພາບຊີວິດຈິງ ເພື່ອວ່າເຂົາຈະສາ ມາດນຳໃຊ້ ຄວາມຮູ້ໃຫ້ເກີດຜົນ. ຄູທີ່ຮູ້ເດັກ ແລະ ຊຸມຊົນຂອງຕົນດີ ຈະສາມາດຍົກເອົາຕົວຢ່າງຕ່າງໆ ໄດ້ຢ່າງງ່າຍດາຍ ຈາກຫ້ອງຖິ່ນເຂົ້າໃນການວາງແຜນບົດຮຽນທີ່ ຈະສອນ.

ຢ່າງໃດກໍຕາມ, ຄູຈຳນວນຫລວງຫລາຍ ຍັງບໍ່ເຄີຍໄດ້ຮັບການແນະນຳການວາງແຜນບົດ ຮຽນ. ພວກເຂົາມັກຈະຖືກສິດສອນໃຫ້ອີງໃສ່ປຶ້ມແບບຮຽນ. ໃນບາງກໍລະນີ, ກໍຍ້ອນວ່າມັນມີພຽງ ແຕ່ປຶ້ມແບບຮຽນຢ່າງດຽວເປັນສື່ການສອນ.

ບໍ່ວ່າຈະຢູ່ໃນກໍລະນີໃດກໍຕາມ, ພວກເຂົາຕ້ອງວາງແຜນວິທີສື່ສານຂໍ້ມູນຢູ່ ໃນປຶ້ມແບບ ຮຽນໃນທາງທີ່ຈະເຮັດໃຫ້ເດັກເຂົ້າໃຈ. ສຳລັບຫ້ອງຮຽນຮ່ວມ, ການວາງແຜນນີ້ບໍ່ ແມ່ນສິ່ງໜູໜາ ແຕ່ມັນເປັນສິ່ງຈຳເປັນ ຍ້ອນວ່າ ຕ້ອງໄດ້ພິຈາລະນາຄົ້ນຄວ້າເຖິງຄວາມຕ້ອງການຂອງເດັກທີ່ມີ ພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ. ພວກເຮົາຈຳເປັນຕ້ອງຮູ້ຢ່າງນ້ອຍ ສິ່ງດັ່ງຕໍ່ໄປນີ້:

- ພວກເຮົາພວມສອນອັນໃດ (ຫົວຂໍ້, ເນື້ອໃນ)?
- ເປັນຫຍັງພວກເຮົາຈຶ່ງສອນມັນ (ເປົ້າປະສົງ/ຈຸດປະສົງ)?
- ພວກເຮົາຈະສອນມັນຢ່າງໃດ (ວິທີ/ຂະບວນການ)?
- ເດັກໄດ້ຮູ້ຫຍັງມາກ່ອນແລ້ວ (ການຮຽນຮູ້ກ່ອນໜ້ານີ້; ການປະເມີນກ່ອນການຮຽນ)?
- ເດັກຈະຕ້ອງເຮັດຫຍັງແດ່ (ກິດຈະກຳຕ່າງໆ)?
- ພວກເຮົາຈະບໍລິຫານ - ຈັດການສອນບົດຮຽນແນວໃດ (ລວມທັງການຈັດຕັ້ງສະພາບ ແວດລ້ອມທາງກາຍະພາບ ແລະ ສັງຄົມ)?
- ກິດຈະກຳຕ່າງໆຈະເໝາະກັບເດັກ**ທຸກຄົນ** ຫລືບໍ່?
- ເດັກຈະມີໂອກາດເຮັດວຽກເປັນຄູ່ ຫລື ເປັນກຸ່ມນ້ອຍ ຫລືບໍ່?
- ເດັກຈະມີວິທີບັນທຶກສິ່ງທີ່ເຂົາໄດ້ເຮັດແລ້ວແນວໃດ (ຜົນງານຈາກການຮຽນຮູ້ ເຊັ່ນ ພາບ ແຕ້ມຕ່າງໆ)?

- ພວກເຮົາຈະຮູ້ໄດ້ແນວໃດວ່າເດັກໄດ້ຮຽນຮູ້ແລ້ວ (ການສະທ້ອນຄືນ/ສ່ອງແສງ ແລະ ການປະເມີນ)?
- ພວກເຮົາຈະເຮັດຫຍັງໃນຕໍ່ໜ້າ (ການສະທ້ອນກັບ ແລະ ການວາງແຜນ ສຳລັບອະນາຄົດ)?

ບາງວິທີທາງທີ່ພວກເຮົາສາມາດຈັດຕັ້ງຕົນເອງ ແລະ ວາງແຜນບົດຮຽນຂອງເຮົາໃຫ້ໄດ້ດີ ແມ່ນ ຕ້ອງຜ່ານການໃຊ້ແມ່ແບບການວາງແຜນການສອນແບບງ່າຍໆ, ຮ່າງບົດສອນ ຫລື ແບບຟອມການວາງແຜນການສອນປະຈຳວັນ ຄືດັ່ງໃນບາງ ຕົວຢ່າງທີ່ນີ້. ໃຫ້ພະຍາຍາມ ໃຊ້ຢ່າງນ້ອຍຈັກໜຶ່ງ ຕົວຢ່າງ ໃນການວາງແຜນການສອນ, ບາງທີອາດຈະເລີ່ມດ້ວຍໜຶ່ງຫົວຂໍ້ ຫລື ໜຶ່ງບົດຮຽນກ່ອນ. ມັນຈະເຮັດ ໃຫ້ການລິເລີ່ມທີ່ໝັ້ນຄົງໃນການຈັດຕັ້ງການສອນຂອງທ່ານ; ວິທີຕິດຕາມຊ່ວຍເຫລືອເດັກ ວ່າເຂົ້າໃຈສິ່ງ ທີ່ໄດ້ສອນໄປແລ້ວຫລືຍັງ ແລະ ໂອກາດ ສຳລັບ ທ່ານເພື່ອຄົ້ນຄິດ ກ່ຽວກັບສິ່ງທີ່ທ່ານຈະເຮັດໃນຂັ້ນຕໍ່ໄປ ເພື່ອປັບປຸງການສອນຂອງທ່ານຄືແນວ ໃດ.

ແມ່ແບບການວາງແຜນບົດສອນທີ່ຈະສອນ

ຫົວຂໍ້	ຈຸດປະສົງ	ວິທີສິດສອນ	ປະເມີນກ່ອນສອນ	ການກຽມຫ້ອງຮຽນ	ກິດຈະກຳເດັກ	ຜະລິດພັນຂອງການຮຽນຮູ້	ການສ່ອງແສງ	ຄຳເຫັນ(ການສະທ້ອນກັບ)

ຮ່າງແຜນບົດຮຽນທີ່ຈະສອນ

ວິຊາ:

.....

.....

ຫ້ອງຮຽນ ຫລື ກຸ່ມທີ່ຈະສອນ

.....

ຈຳນວນນັກຮຽນ:

.....

.....

ເວລາສອນ: .....

ຈຸດປະສົງຂອງການຮຽນຮູ້

ທ່ານຕ້ອງການຢາກໃຫ້ເດັກຮຽນຫຍັງໃນບົດຮຽນນີ້?
ໃຫ້ຄົ້ນຄິດກ່ຽວກັບຄວາມຮູ້, ທັກສະ ແລະ ທັດສະນະຄະຕິທີ່ທ່ານຢາກໃຫ້ເຂົາ ຮຽນຮູ້.
ໃຫ້ຄັດເລືອກ ຈັກສອງສາມຈຸດປະສົງເພື່ອເນັ້ນ ໃນການສອນບົດຮຽນໜຶ່ງ.

ຊັບພະຍາກອນ:

ທ່ານຕ້ອງການຊັບພະຍາກອນຫຍັງແດ່ສຳລັບສອນບົດຮຽນນີ້? ສື່ ,ເອກະສານ, ອັນໃດ ແດ່ທີ່ເດັກຈຳເປັນ? ເດັກຈະສາມາດຊ່ອຍຊອກຫາຊັບພະຍາກອນ ໃຫ້ໄດ້ມາຢ່າງໃດ?

ເດັກທີ່ມີຄວາມຕ້ອງການພິເສດ:

ມີເດັກໃນຫ້ອງ/ກຸ່ມ ທີ່ມີຄວາມຕ້ອງການຊ່ອຍເຫລືອພິເສດຫລືບໍ່?
ມີການຊ່ອຍເຫລືອຊະນິດໃດທີ່ທ່ານຈຳເປັນຕ້ອງສະໜອງໃຫ້ເດັກເຫລ່ານີ້?
ທ່ານຈຳເປັນຕ້ອງຊ່ອຍເຫລືອເຂົາແບບລາຍບຸກຄົນຫລືບໍ່?

ການໃຫ້ຄຳແນະນຳ:

ໃຫ້ບອກເດັກ ສິ່ງທີ່ທ່ານຕ້ອງການໃຫ້ເຂົາຮຽນຮູ້ໃນບົດຮຽນນີ້. ຄູບາງຄົນຈະຂຽນສິ່ງດັ່ງ ກ່າວໃສ່ກະດານກ່ອນຈະເລີ່ມບົດຮຽນ. ໃຫ້ຄົ້ນຄິດກ່ຽວກັບວິທີທີ່ທ່ານຈະເລີ່ມບົດຮຽນ. ຢ່າລືມທົບທວນແບບສັ້ນໆກ່ຽວກັບ ສິ່ງທີ່ເດັກໄດ້ຮຽນໃນບົດຮຽນຜ່ານມາ. ພະຍາຍາມ ເລີ່ມດ້ວຍການຕັ້ງບັນຫາ ເພື່ອໃຫ້ເດັກຕອບ ຫລື ແກ້ໂດຍໃຊ້ຄຳຖາມແບບປາຍເປີດ ຫລື

ໂດຍໃຊ້ຮູບພາບ ເພື່ອສົນທະນາອະພິປາຍເຊິ່ງ ຈະສາມາດນຳໄປສູ່ກິດຈະກຳຫລັກຂອງທ່ານ.

ກິດຈະກຳຫລັກ:

- ທ່ານຕ້ອງການໃຫ້ເດັກເຮັດຫຍັງແດ່ໃນພາກສ່ວນສຳຄັນຂອງບົດຮຽນ?
- ຕ້ອງແນ່ໃຈວ່າກິດຈະກຳ ຕ່າງໆຂອງທ່ານຈະເຮັດໃຫ້ເດັກໄປເຖິງຈຸດປະສົງຂອງການຮຽນຮູ້.
- ໃຫ້ພະຍາຍາມບັນຈຸກິດຈະກຳທີ່ຫລາກຫລາຍເຂົ້າໄປເຊັ່ນຕົວຢ່າງ: ພະຍາມຍາມບອກໃຫ້ເດັກ ເຮັດວຽກເປັນຄູ່ ຫລື ເປັນກຸ່ມນ້ອຍ.
- ໃຫ້ຕັດສິນໃຈວ່າຈະແນະນຳ ແລະ ອະທິບາຍວິທີເຮັດກິດຈະກຳແນວໃດ.
- ຕັດສິນໃຈວ່າຈະໃຫ້ເວລາແກ່ເດັກເຮັດກິດຈະກຳຢ່າງໃດ. ສິ່ງດັ່ງກ່າວມັກຈະເປັນໂອກາດທີ່ດີ ເພື່ອຊ່ວຍເຫລືອເດັກທີ່ມີຄວາມຕ້ອງການພິເສດ

ສະຫລຸບ:

ໃຫ້ເລືອກກິດຈະກຳ ຫລື ການສົນທະນາອະພິປາຍໃນຕອນທ້າຍຂອງບົດຮຽນ ເພື່ອເຮັດໃຫ້ບັນລຸຈຸດປະສົງຂອງບົດຮຽນ. ຖາມນັກຮຽນວ່າ ເຂົາໄດ້ຮຽນຮູ້ຫຍັງແລ້ວ.

ການສະທ້ອນພາບ/ສ່ອງແສງດ້ວຍຕົນເອງ ຫລັງຈາກທ່ານໄດ້ສອນບົດຮຽນແລ້ວ:

ໃຫ້ໃຊ້ຊ່ອງຫວ່າງໃນຕາຕະລາງນີ້ ເພື່ອຂຽນບັນທຶກສັ້ນໆ ສຳລັບທ່ານເອງວ່າບົດຮຽນທີ່ສອນເປັນໄປຄືແນວໃດ ແລະ ອາດສາມາດປັບປຸງໃນເທື່ອໜ້າຢ່າງໃດ. ເດັກໄດ້ບັນລຸຈຸດປະສົງຫລືບໍ່? ເດັກທຸກຄົນໄດ້ມີສ່ວນຮ່ວມຫລືບໍ່? ທ່ານຈະສາມາດເຮັດອັນໃດທີ່ແຕກຕ່າງໄປຈາກນີ້ໃນຄັ້ງໜ້າ?

ແບບຟອມການວາງແຜນການສອນປະຈຳວັນຂອງຄູ		
ວັນທີ:		
1.	ຈຸດປະສົງຂອງການຮຽນຮູ້	ຊັບພະຍາກອນ:
	ໂຄງສ້າງຂອງບົດຮຽນ/ບົດສອນ	
2.	ຈຸດປະສົງຂອງການຮຽນຮູ້	ຊັບພະຍາກອນ:
	ໂຄງສ້າງຂອງບົດຮຽນ/ບົດສອນ	
3.	ຈຸດປະສົງຂອງການຮຽນຮູ້	ຊັບພະຍາກອນ:
	ໂຄງສ້າງຂອງບົດຮຽນ/ບົດສອນ	
4.	ຈຸດປະສົງຂອງການຮຽນຮູ້	ຊັບພະຍາກອນ:

	ໂຄງສ້າງຂອງບົດຮຽນ/ບົດສອນ	
5.	ຈຸດປະສົງຂອງການຮຽນຮູ້	ຊັບພະຍາກອນ:
	ໂຄງສ້າງຂອງບົດຮຽນ/ບົດສອນ	

3.4 ການສິດສອນຢ່າງມີປະສິດທິຜົນ ຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍຄົນ ສອນແນວ ໃດ? ບໍ່ແມ່ນພຽງແຕ່ວ່າ ຈະສອນອັນໃດ?

ໃຫ້ທ່ານຫລັບຕາ ແລະ ຄິດຄືນຫລັງຕອນເວລາທີ່ທ່ານເປັນນັກຮຽນ; ບາງທີທ່ານອາດເປັນຜູ້ໜຶ່ງ ທີ່ຮຽນຢູ່ໃນຫ້ອງຮຽນນັ້ນ. ມີເວລາໃດແດ່ ທີ່ທ່ານມີຄວາມຮູ້ສຶກວ່າທ່ານ ບໍ່ໄດ້ຮຽນຮູ້ອັນໃດເລີຍ? ໃຫ້ທ່ານຂຽນແນວຄິດຂອງທ່ານລົງໃນແຜ່ນເຈ້ຍ. ໃຫ້ຂຽນເຫດຜົນທີ່ມີລັກສະນະທຳມະດາທີ່ສຸດວ່າ ເປັນຫຍັງ ນັກຮຽນທີ່ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ຈຶ່ງບໍ່ສາມາດຕິດຕາມສິ່ງທີ່ທ່ານກຳລັງສິດສອນລົງ ຂ້າງລຸ່ມນີ້. ເຫດຜົນນີ້ມີຢູ່ໃນແນວຄິດທີ່ທ່ານໄດ້ຂຽນລົງແຜ່ນເຈ້ຍບໍ?

- ບົດຮຽນ, ການບັນລະຍາຍ ຫຼື ກິດຈະກຳບໍ່ຈະແຈ້ງຕໍ່ນັກຮຽນ.
- ປາກົດວ່າຄູສອນບໍ່ມີຄວາມກະຕືລືລົ້ນ ຫຼືວ່າ ເບື່ອໜ່າຍ.
- ວິທີການສິດສອນເປັນຕາໜ້າເບື່ອ.
- ບັນດາຕົວຢ່າງທີ່ນຳໃຊ້ຢູ່ໃນຫ້ອງຮຽນ ບໍ່ສາມາດຊ່ວຍເຫຼືອນັກຮຽນໃຫ້ເຂົ້າໃຈ ແລະ ນຳໃຊ້ແນວຄິດທີ່ໄດ້ສິດສອນນັ້ນ ຢູ່ໃນພາກປະຕິບັດຕົວຈິງ. ບັນດາຕົວຢ່າງບໍ່ມີຄວາມໝາຍ.
- ຈຸດສຳຄັນບໍ່ໄດ້ຖືກເນັ້ນໜັກ ແລະ ແນວຄວາມຄິດຫຼັກໆ ບໍ່ໄດ້ຖືກສະຫຼຸບສັງລວມ.

ເຫດຜົນເຫຼົ່ານີ້ ແມ່ນລັກສະນະຂອງວິທີການທີ່ທ່ານສິດສອນບໍ? ທ່ານຈົ່ງມີຄວາມຊື່ສັດ! ຖ້າຫາກແມ່ນກໍບໍ່ຕ້ອງເປັນຫ່ວງ. ຂໍ້ມູນຢູ່ໃນພາກນີ້ຈະຊ່ວຍເຫຼືອທ່ານ ເພື່ອສິດສອນ ໃຫ້ມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.

ການແຕ່ງບົດສອນ.

ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ມັນມີຄວາມສຳຄັນທີ່ສຸດ ໃນການນຳໃຊ້ເວລາ ຂອງ ທ່ານທີ່ມີ ໃຫ້ເປັນປະໂຫຍດທີ່ສຸດ ແລະ ໃຫ້ມີເວລາພຽງພໍ ສຳລັບ ການຮຽນຮູ້. ອັນນີ້ ມີຄວາມໝາຍວ່າໃຫ້ມີການວາງແຜນໄວ້ລ່ວງໜ້າ. ຕ້ອງເຮັດພາກສ່ວນໃຫຍ່ໆຂອງວຽກງານການສອນໃນຫ້ອງຮຽນ ທີ່ມີ ນັກຮຽນຈຳນວນຫຼາຍ ໃຫ້ດີເສຍກ່ອນໃນມື້ທຳອິດ.

ຕົວຢ່າງ, ***ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນໜ້ອຍ ທ່ານອາດເອົາວຽກໃຫ້ນັກຮຽນ ໂດຍບໍ່ຕ້ອງມີການກະກຽມໄວ້ລ່ວງໜ້າໄດ້ຢ່າງງ່າຍດາຍ, ແຕ່ວ່າ ຢູ່ໃນ ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ທ່ານ***

ຕ້ອງໄດ້ໃຊ້ເວລາຫຼາຍກວ່າ ເພື່ອວາງແຜນແຕ່ງບົດສອນ ແລະ ວາງແຜນກິດຈະກຳ ຂອງບົດສອນ ຢ່າງລະອຽດຖີ່ຖ້ວນ.

ແຕ່ກໍເປັນໜ້າເສຍດາຍທີ່ມີຄູສອນຈຳນວນຫຼວງຫຼາຍ ບໍ່ໄດ້ຮັບການຮຽນຮູ້ວ່າຈະແຕ່ງບົດສອນແນວໃດ. ເຂົາເຈົ້າໄດ້ຖືກສອນເພື່ອໃຫ້ອີງໃສ່ປຶ້ມແບບຮຽນ. ໃນບາງກໍລະນີ ຍ້ອນວ່າ ປຶ້ມແບບຮຽນ ແມ່ນອຸປະກອນການສິດສອນແນວດຽວທີ່ມີ. ເຖິງຢ່າງໃດກໍດີ ການແຕ່ງບົດສອນທີ່ດີ ຈະຊ່ວຍເຫຼືອທ່ານໃນການຫຼຸດຜ່ອນຄວາມກັງວົນ ຕໍ່ການສິດສອນຢູ່ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ເພາະວ່າ ທ່ານຈະຮູ້ໃນສິ່ງທີ່ທ່ານຈະສອນກ່ອນລ່ວງໜ້າ, ເປັນຫຍັງຈຶ່ງສອນ ແລະ ຈະສອນແນວໃດ. ທ່ານຈະສາມາດຖ່າຍທອດບົດຮຽນຢ່າງຫຸ່ນທ່ຽງ, ແລະ ຄວາມໝັ້ນໃຈຂອງທ່ານຈະເຮັດໃຫ້ນັກຮຽນມີຄວາມເຊື່ອຖື ແລະ ມີຄວາມສະບາຍໃຈໃນການຮຽນຮູ້ຈາກທ່ານ. ເຖິງແມ່ນວ່າ ທ່ານຈະອີງໃສ່ປຶ້ມແບບຮຽນເປັນຫຼັກໃນການສອນ, ທ່ານຈະຕ້ອງວາງແຜນວ່າ ທ່ານຈະສື່ສານຂໍ້ມູນແນວໃດ ເພື່ອນັກຮຽນທຸກຄົນເຂົ້າໃຈ. ສຳລັບຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ການວາງແຜນແບບນີ້ບໍ່ແມ່ນເລື່ອງທີ່ງ່າຍ ແຕ່ມັນແມ່ນສິ່ງທີ່ຈຳເປັນ ເພາະວ່າມັນຈະນຳເອົາຄວາມເປັນລະບຽບມາສູ່ສະພາບແວດລ້ອມຂອງຫ້ອງຮຽນ, ເຖິງແມ່ນວ່າຫ້ອງຮຽນຈະແອອັດ. ໃຈກາງຂອງຂະບວນການແຕ່ງບົດສອນ ມີ 3 ຢ່າງ ທີ່ສຳຄັນ:

1. ສະພາບແວດລ້ອມທາງດ້ານວັດຖຸ ແລະ ຈິດຕະສາດ-ສັງຄົມຂອງຫ້ອງຮຽນ, ຄືດັ່ງທີ່ໄດ້ຂຽນໄວ້ຢູ່ຂ້າງເທິງ.
2. ເນື້ອໃນບົດສອນ, ມີຫົວຂໍ້ໃດທີ່ໄດ້ກຳນົດຢູ່ໃນເອກະສານຫຼັກສູດແຫ່ງຊາດ ແລະ ຈະເຮັດໃຫ້ຫົວຂໍ້ນີ້ມີຄວາມໝາຍຕໍ່ນັກຮຽນຂອງທ່ານແນວໃດ ແລະ ຈະດັດປັບໃຫ້ເໝາະສົມກັບຊຸມຊົນໃນທ້ອງຖິ່ນແນວໃດ; ແລະ
3. ຂະບວນການ ຫຼືວ່າ ຈະສິດສອນເນື້ອໃນບົດຮຽນແນວໃດ ຊຶ່ງອາດນຳໃຊ້ວິທີສິດສອນຕ່າງໆ ເພື່ອໃຫ້ເໝາະສົມກັບວິທີການຮຳ່ຮຽນຂອງນັກຮຽນ ຫຼື ເພື່ອໃຊ້ເວລາເທົ່າທີ່ມີໃຫ້ຫຼາຍທີ່ສຸດ ສຳລັບ ການສິດສອນ ແລະ ຮຳ່ຮຽນ.

ສິ່ງຕໍ່ໄປນີ້ ແມ່ນອົງປະກອບອັນສຳຄັນທີ່ສຸດຈຳນວນໜຶ່ງ ຢູ່ໃນການແຕ່ງບົດສອນທີ່ສາມາດ ຊ່ວຍທ່ານເພື່ອຄຸ້ມຄອງການຮຳ່ຮຽນ ຂອງນັກຮຽນຫຼາຍໆຄົນ.

ໃຫ້ມີຄວາມສະບາຍໃຈກັບສິ່ງທີ່ທ່ານກຳລັງສິດສອນ (ຫົວຂໍ້, ເນື້ອໃນ). ການສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ຈະມີຄວາມຫຍຸ້ງຍາກຫຼາຍຂຶ້ນ ຖ້າຫາກທ່ານບໍ່ມີຄວາມແນ່ໃຈ ກ່ຽວກັບສິ່ງທີ່ທ່ານກຳລັງສິດສອນ. ໃຫ້ອ່ານຫົວຂໍ້ເຫຼົ່ານັ້ນໃຫ້ຫຼາຍໆຄັ້ງ ເພື່ອທ່ານຈະມີຄວາມໝັ້ນໃຈໃນການນຳສະເໜີມັນ ແລະ ສາມາດຮັກສາຈຸດສຸມໄດ້ຢ່າງສະໝ່ຳສະເໝີໃນເວລາສິດສອນ. ນັກຮຽນຈະຕິດຕາມການບັນຍາຍບົດຮຽນຂອງທ່ານ ແລະ ກິດຈະກຳຂອງບົດຮຽນໄດ້ຢ່າງງ່າຍດາຍ, ແລະ ຈະຫຼຸດຜ່ອນເພື່ອບໍ່ໃຫ້ພວກເຂົາຮູ້ສຶກເບື່ອ ແລະ ສັບສົນກ່ຽວກັບບົດຮຽນ.

ໃຫ້ຄິດເຖິງຄຳຖາມທີ່ໃຊ້ຖາມນັກຮຽນ ແລະ ໃຫ້ຄາດຄະເນຄຳຖາມ ຊຶ່ງນັກຮຽນອາດຈະຖາມ ທ່ານ. ໃຫ້ທົບທວນເບິ່ງອຸປະກອນການສອນ, ວຽກທີ່ຈະ ເອົາໃຫ້ນັກຮຽນເຮັດ ແລະ ອ່ານເບິ່ງບັນຊີ ລາຍຊື່ຂອງຄູ ຜູ້ທີ່ໄດ້ສອນຫົວຂໍ້ນີ້ມາກ່ອນແລ້ວ. ຖ້າເປັນໄປໄດ້, ໃຫ້ເຂົ້າຮ່ວມໂມງສອນທີ່ສອນ ໂດຍຄູຜູ້ມີປະສົບການ ເພື່ອເບິ່ງວ່າເພິ່ນຈັດສັນເນື້ອໃນ ແລະ ກິດຈະກຳສຳລັບນັກຮຽນຢູ່ໃນຫ້ອງ ຮຽນທີ່ມີນັກຮຽນ ຈຳນວນຫຼາຍ ຄືແນວໃດ.

ໃຫ້ມີຄວາມຮູ້ຢ່າງຈະແຈ້ງວ່າ ເປັນຫຍັງທ່ານຈຶ່ງສອນຫົວຂໍ້ນີ້ ແລະ ຈຸດປະສົງຂອງ ການຮຽນຮູ້. ໃຫ້ຄິດ ກ່ຽວກັບ ຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ທີ່ທ່ານຢາກໃຫ້ນັກຮຽນຂອງ ທ່ານຮຽນຮູ້ ແລະ ໃຫ້ເລືອກເອົາ 2 ຫຼື 3 ຢ່າງ ເພື່ອສຸມໃສ່ໃນບົດຮຽນໜຶ່ງ. ໃຫ້ອະທິບາຍຈະແຈ້ງ ຕໍ່ນັກຮຽນທຸກຄົນຂອງ ທ່ານໃນສິ່ງທີ່ທ່ານຕ້ອງການ ໃຫ້ເຂົາເຈົ້າຮຽນຮູ້ຈາກບົດຮຽນ ສະເພາະໃດ ໜຶ່ງ. ມີຄູສອນໃນຫ້ອງຮຽນທີ່ ມີນັກຮຽນຫຼາຍຈຳນວນໜຶ່ງ ຂຽນຈຸດປະສົງຂອງການຮ່ຳຮຽນໃສ່ ກະດານດຳ ຫຼື ຂຽນໃສ່ ເຈ້ຍແຜນໃຫຍ່ ກ່ອນຈະເລີ່ມການສິດສອນແລ້ວພວກເພິ່ນກໍອະທິບາຍ ຈຸດປະສົງ ແຕ່ລະອັນໃຫ້ນັກຮຽນຟັງກ່ອນຈະ ເລີ່ມຕົ້ນການສອນ ເພື່ອໃຫ້ນັກຮຽນມີຄວາມເຂົ້າໃຈ ເປັນອັນໜຶ່ງອັນດຽວກັນ ຕໍ່ກັບບົດຮຽນທີ່ຈະໄດ້ຮຽນ.

ສ້າງໂຄງຮ່າງບົດສອນແບບມີເຫດມີຜົນ. ວິທີທີ່ດີທີ່ສຸດເພື່ອບໍ່ເຮັດໃຫ້ເສຍຄວາມຕັ້ງໃຈ ຂອງ ນັກຮຽນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ແມ່ນການສະເໜີຫົວຂໍ້ ບໍລິບົດ(ເນື້ອຄວາມ) ແລະ ກິດຈະກຳດ້ວຍການສຸ່ມເອົາ. ການສະເໜີບົດສອນຈຳນວນໜຶ່ງ ແລະ ເນື້ອໃນ ຂອງມັນ, ດີທີ່ສຸດແມ່ນ ໃຫ້ສະເໜີໄປຕາມ ລຳດັບກ່ອນ ແລະ ຫລັງເຊັ່ນ ເຫດການທາງດ້ານ ປະຫວັດສາດ ຫຼື ເປັນໄປຕາມ ຂັ້ນຕອນໃນວິທີການແບບເປັນໄປຕາມບາດກ້າວໜຶ່ງໄປສູ່ບາດ ກ້າວຕໍ່ໄປ (ກ ພາໃຫ້ເກີດ ຂ ຊຶ່ງພາໃຫ້ ເກີດ). ບາງເທື່ອທ່ານສາມາດພັນລະນາ ແລະ ກໍຍົກຕົວ ຢ່າງວິທີແກ້ໄຂບັນຫານັ້ນ ຫຼື ດີໄປກວ່ານັ້ນ ແມ່ນໃຫ້ນັກຮຽນເຮັດວຽກພໍໃຜພໍລາວ ຫຼື ເປັນກຸ່ມ ເພື່ອຊີ້ແຈ້ງວ່າ ເຂົາເຈົ້າສາມາດແກ້ບັນຫານັ້ນແນວໃດ.

ໃຫ້ຈື່ຈຳໄວ້ວ່າ: ການທີ່ທ່ານຈັດສັນຂໍ້ມູນໄວ້ໃນສະໝອງຂອງທ່ານແນວໃດນັ້ນ ອາດຈະ ບໍ່ແມ່ນ ວິທີດຽວກັນກັບທີ່ນັກຮຽນເຮັດ. ໃຫ້ພິຈາລະນາຄວາມຫຍຸ້ງຍາກຂອງອຸປະກອນ ທີ່ທ່ານ ສອນ ແລະ ລະດັບຄວາມອາດສາມາດ ຂອງນັກຮຽນຂອງທ່ານ ໃນຂະນະທີ່ທ່ານໄດ້ຕັດສິນໃຈວ່າ ຈະເອົາຂໍ້ມູນອັນໃດປະກອບໃນບົດສອນ, ຈະຈັດລຳດັບແນວໃດ ແລະ ໃຊ້ວິທີໃດ (ວິທີສິດສອນ, ຕົວຢ່າງ, ແລະ ອື່ນໆ...)

ວາງແຜນຍຸດທະສາດການສິດສອນແລະກິດຈະກຳໄວ້ລ່ວງໜ້າ.

ເຖິງແມ່ນວ່າທ່ານອາດຈະຢາກວາງ ແຜນການສອນ ແລະ ກິດຈະກຳໄວ້ກ່ອນ, ແຕ່ບໍ່ຄວນທີ່ຈະ ວາງແຜນເຮັດການບັນລະຍາຍຕະຫລອດໄລຍະ. ເນື່ອງຈາກວ່າໄລຍະຄວາມຕັ້ງໃຈຂອງນັກຮຽນ ມີຈຳກັດແຕ່ 10-15 ນາທີ. ມັນຈະເປັນການດີທີ່ສຸດ ຖ້າທ່ານປ່ຽນແປງຮູບການຂອງການບັນ

ລະຍາຍເລື້ອຍໆ ເພື່ອນັກຮຽນທຸກຄົນມີຄວາມສົນໃຈພິເສດ ແມ່ນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ນັກຮຽນຈະເລີ່ມຕົ້ນລົມກັນ (ຫຼືອາດເຫງົານອນ) ໃນເວລາເຂົາເຈົ້າຮູ້ສຶກເບື່ອໜ່າຍ. ດັ່ງນັ້ນ ຄວນວາງແຜນ "ບັນລະຍາຍໜ້ອຍ" ສະຫລັບກັບການເຮັດກິດຈະກຳສັ້ນໆເຊັ່ນ ຕັ້ງຄຳຖາມ ແລະ ຄຳຕອບ ຫຼື ບອກໃຫ້ນັກຮຽນແລກປ່ຽນຕົວຢ່າງ ຫຼື ປະສົບການ ສ່ວນຕົວທີ່ກ່ຽວຂ້ອງກັບນັກຮຽນນັ້ນ.

ໃນການແຕ່ງບົດສອນ ໃຫ້ກຳນົດກິດຈະກຳທີ່ນັກຮຽນທຸກຄົນສາມາດມີສ່ວນຮ່ວມຕາມຄວາມເໝາະສົມ, ແລະ ໃຫ້ເລືອກວິທີການສິດສອນທີ່ດີທີ່ສຸດໜຶ່ງ ຫຼື ສອງຢ່າງ ສຳລັບການສິດສອນແຕ່ລະພາກ: ການບັນລະຍາຍ, ສົນທະນາເປັນກຸ່ມນ້ອຍ, ເຮັດວຽກດ້ວຍຕົນເອງ, ສະແດງບົດບາດສົມມຸດ, ການສາທິດ ແລະ ອື່ນໆ. ໃຫ້ທ່ານຕັດສິນໃຈວ່າ ທ່ານຈະເຮັດແນວໃດ: (ກ) ກະກຽມການສິດສອນໃນຫ້ອງຮຽນ, (ຂ) ນຳສະເໜີແນວຄວາມຄິດໃໝ່, (ຄ) ນັກຮຽນໄດ້ນຳໃຊ້ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ຜ່ານກິດ ຈະກຳ (ຕົວຢ່າງ ຜ່ານການສົນທະນາ, ຂຽນກິດຈະກຳຢູ່ໃນຫ້ອງຮຽນ ຫຼື ວຽກງານຮ່ວມກັນ) ແລະ (ງ) ວັດຜົນເບິ່ງວ່ານັກຮຽນສາມາດນຳເອົາສິ່ງທີ່ໄດ້ຮຽນຮູ້ມານຳໃຊ້ໃນພາກປະຕິບັດໄດ້ ຫຼືບໍ່ (ຕົວຢ່າງ: ໂດຍ ຜ່ານການໃຊ້ຄຳຖາມ, ການເຮັດວຽກທີ່ມອບໝາຍໃຫ້ຢູ່ໃນຫ້ອງຮຽນ, ການແກ້ໂຈດ ຫຼື ເຮັດວຽກບ້ານ).

ການແຕ່ງບົດສອນຢ່າງລະອຽດຖີ່ຖ້ວນນັ້ນ ແມ່ນມີຄວາມຈຳເປັນ ເພື່ອພັດທະນາກິດຈະກຳການຮຽນທີ່ເໝາະສົມ, ແຕ່ຄ່າຕອບແທນທີ່ສຳຄັນທີ່ສຸດ ແມ່ນນັກຮຽນສາມາດຮຽນໄດ້ດີກວ່າຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ. ໃນຕອນເລີ່ມຕົ້ນແທນທີ່ຈະຖາມວ່າ"ຂ້ອຍຈະເຮັດອັນໃດ ໃນການສອນແຕ່ລະພາກ" ໃຫ້ສຸມໃສ່ວ່າ "ນັກຮຽນຂອງຂ້ອຍຈະເຮັດອັນໃດ?" ບໍ່ວ່າທ່ານຈະເລືອກກິດຈະກຳອັນໃດກໍຕາມ ຕ້ອງແນ່ໃຈວ່າ ນັກຮຽນຂອງທ່ານຈະຕ້ອງບັນລຸຈຸດປະສົງຂອງການຮຽນ.

ໃຫ້ຈື່ຈຳໄວ້ວ່າ: ນັກຮຽນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ຈະມີຄວາມເອົາໃຈໃສ່ຕິດຕາມບົດຮຽນຫຼາຍຂຶ້ນຖ້າຫາກວ່າເຂົາເຈົ້າໄດ້ເຫັນຄວາມຫຼາກຫຼາຍຂອງກິດຈະກຳການຮ່ຳຮຽນ ແລະຍຸດທະສາດການສິດສອນ.

ກຳນົດຊັບພະຍາກອນ ແລະ ອຸປະກອນຕ່າງໆ: ມີຊັບພະຍາກອນອັນໃດແດ່ ທີ່ທ່ານຕ້ອງການສຳລັບບົດຮຽນ? ຊັບພະຍາກອນເຫຼົ່ານີ້ ອາດເປັນຊັບພະຍາກອນດ້ານວັດຖຸ ເຊັ່ນ ແຜ່ນປິສເຕ ຫຼື ປຶ້ມແບບຮຽນ, ອາດເປັນຊັບພະຍາກອນບຸກຄົນ ເຊັ່ນ ສະມາຊິກຊຸມຊົນຜູ້ທີ່ມີຄວາມຊ່ຽວຊານດ້ານການຮ້ອງເພງ, ຟ້ອນ, ຫຼື ຜະລິດເຄື່ອງຫັດຖະກຳທ້ອງຖິ່ນ. ສຳລັບນັກຮຽນຂອງທ່ານ, ເພື່ອຈະເຮັດກິດຈະກຳ ເຊັ່ນ ຜະລິດເຄື່ອງຫັດຖະກຳທ້ອງຖິ່ນ, ມີວັດຖຸອັນໃດທີ່ເຂົາເຈົ້າຕ້ອງການ, ສາມາດຂໍແບ່ງປັນວັດຖຸເຫຼົ່ານັ້ນນຳນັກຮຽນຜູ້ອື່ນໆໄດ້ບໍ ເຊັ່ນ ໃນເວລາເຮັດວຽກເປັນກຸ່ມ? ນັກຮຽນຂອງ ຫຼື ຄອບຄົວ ຂອງເຂົາເຈົ້າສາມາດສະໜອງວັດຖຸເຫຼົ່ານັ້ນໄດ້ບໍ?

ຂອກເອົາຜູ້ຊ່ວຍການສິດສອນໄວ້ລ່ວງໜ້າ. ໃນຖານະທີ່ທ່ານເປັນຄູສອນປະຈຳຫ້ອງ, ໃນ ຂະນະທີ່ທ່ານມີຄວາມຮັບຜິດຊອບຕໍ່ການຮ່ຳຮຽນຂອງນັກຮຽນຂອງທ່ານ, ທ່ານສາມາດຂອກເອົາ ຜູ້ອື່ນໆມາຊ່ວຍເຫຼືອທ່ານ "ຜູ້ຊ່ວຍສິດສອນ". ພວກເພີ່ນເຫຼົ່ານີ້ ເປັນຊັບສິນບັດທີ່ມີຄ່າຕໍ່ກັບຫ້ອງ ຮຽນທີ່ມີນັກຮຽນຈຳນວນຫຼາຍ ເພາະວ່າ ພວກເພີ່ນສາມາດຊ່ວຍໃຫ້ທ່ານໄດ້ເຮັດວຽກກັບນັກຮຽນ ເປັນລາຍບຸກຄົນ, ເພື່ອຄຸ້ມຄອງກິດຈະກຳການຮຽນໄດ້ຢ່າງມີປະສິດຕິຜົນ ແລະ ສັງເກດເບິ່ງຫ້ອງ ຮຽນທັງໝົດໄດ້, ຕົວຢ່າງ ຂໍຄວາມຊ່ວຍເຫຼືອນຳຄູສອນທີ່ບຳນານແລ້ວ, ນັກຮຽນທີ່ຈົບມັດທະຍົມ ປາຍ ຫຼື ຜູ້ປົກຄອງເດັກ ເພື່ອຄຸ້ມຄອງຫ້ອງຮຽນຂອງທ່ານ ຫຼື ເພື່ອສອນບົດຮຽນໃດໜຶ່ງທີ່ ເໝາະສົມ. ພວກເພີ່ນສາມາດຊ່ວຍເຫຼືອນັກຮຽນ ຂອງທ່ານໃນການດຳເນີນກິດຈະກຳເປັນກຸ່ມ. ພ້ອມກັນນັ້ນ ທ່ານຍັງສາມາດຂໍໃຫ້ນັກຮຽນ ຜູ້ທີ່ໃຫຍ່ກວ່າ ໝູ່ ຫຼື ຜູ້ຮຽນເກັ່ງກວ່າໝູ່ຢູ່ໃນຫ້ອງ ໃຫ້ເປັນຄູສອນໝູ່ເພື່ອນຂອງເຂົາ ໃຫ້ຊຸກຍູ້ "ຜູ້ຊ່ຽວຊານ"ຈາກຊຸມຊົນ ເພື່ອມາເປັນວິທະຍາກອນຢູ່ ໃນຫ້ອງຮຽນ ເພື່ອເວົ້າກ່ຽວກັບທັກສະ ແລະ ຄວາມຮູ້ພິເສດໃດໜຶ່ງ.

ໃຫ້ເອົາໃຈໃສ່ຕໍ່ນັກຮຽນໂດຍເບິ່ງຄວາມຕ້ອງການເປັນລາຍບຸກຄົນຫຼາຍກວ່າເກົ່າ. ໃນຫ້ອງຮຽນ ມີນັກຮຽນທີ່ມີຄວາມຕ້ອງການພິເສດບໍ? ການຊ່ວຍເຫຼືອປະເພດໃດ ທີ່ທ່ານຕ້ອງ ການສະໜອງ ໃຫ້ນັກຮຽນເຫຼົ່ານັ້ນ? ທ່ານຕ້ອງການຈະຊ່ວຍເຂົາເຈົ້າເປັນການສ່ວນຕົວບໍ ຫຼືວ່າ ນັກຮຽນຜູ້ອື່ນໆ ສາມາດຊ່ວຍ ເຂົາເຈົ້າໄດ້? ທ່ານມີຄວາມຈຳເປັນເພື່ອໃຫ້ນັກຮຽນເຫຼົ່ານັ້ນໄດ້ນັ່ງ ຢູ່ບ່ອນທີ່ເໝາະສົມຢູ່ໃນຫ້ອງຮຽນບໍ? ມັນຈະເປັນການດີ ຖ້າຫາກນັກຮຽນທີ່ມີຄວາມຕ້ອງການພິ ເສດໄດ້ນັ່ງຢູ່ທາງດ້ານແຖວໜ້າບ່ອນ ທີ່ ທ່ານສາມາດຊ່ວຍເຫຼືອເຂົາເຈົ້າໄດ້ຢ່າງງ່າຍດາຍ, ໂດຍ ສະເພາະ ຖ້າຫາກຫ້ອງຮຽນຫາກແອອັດ ຫຼື ມີ ຈຳນວນນັກຮຽນຫຼາຍ.

ພັດທະນາ, ແລະ ຕິດຕາມການແຕ່ງບົດສອນຢ່າງເປັນທາງການ. ບົດສອນທີ່ດີຢ່າງໜ້ອຍ ຄວນບັນລຸຈຸດປະສົງຢູ່ສອງຢ່າງ. ທຳອິດ ໃຫ້ວາງແຜນການສອນທີ່ສະແດງໃຫ້ເຫັນສິ່ງທີ່ຄູຫວັງ ທີ່ຈະເອົາມາສອນ, ແລະ ມັນຍິ່ງຈະມີຄວາມສຳຄັນຫຼາຍຂຶ້ນ, ຖ້າຫາກວ່າຄູ ມີການສື່ສານສິ່ງທີ່ຕົນ ວາງແຜນ ໄວ້ນັ້ນໄປສູ່ນັກຮຽນ ແລະ ກິດຈະກຳຂອງມັນ. ວິທີການຈຳນວນໜຶ່ງທີ່ທ່ານສາມາດນຳ ໃຊ້ແຕ່ງບົດສອນໄດ້ດີ ແມ່ນໂດຍນຳໃຊ້ໂຄງຮ່າງການແຕ່ງບົດສອນແບບງ່າຍດາຍ, ຮູບແບບການ ແຕ່ງບົດສອນປະ ຈຳວັນ ຫຼື ມາຕຣິສ (ຕາຕະລາງ) ການແຕ່ງບົດສອນດັ່ງທີ່ສະແດງ ຢູ່ຂ້າງລຸ່ມນີ້. ພະຍາຍາມນຳໃຊ້ຢ່າງໜ້ອຍໜຶ່ງຢ່າງ ທີ່ນອນຢູ່ໃນຕາຕະລາງນັ້ນ ເພື່ອການວາງແຜນແຕ່ງບົດ ສອນ ທ່ານອາດຈະເລີ່ມຕົ້ນຈາກຫົວຂໍ້ໜຶ່ງ ຫຼື ບົດຮຽນໜຶ່ງ. ມັນຈະໃຫ້ການເລີ່ມຕົ້ນອັນໝັ້ນຄົງໃນ ການຈັດຕັ້ງການສິດສອນ ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ມັນຈະເປັນວິທີການຕິດຕາມ ກຳກັບວ່ານັກຮຽນສາມາດເຂົ້າໃຈສິ່ງ ທີ່ທ່ານສອນ ຫຼືບໍ ແລະ ໃຫ້ໂອກາດແກ່ທ່ານເອງ ເພື່ອຄົ້ນຄິດ ກ່ຽວກັບ ສິ່ງທີ່ຈະເຮັດ ໃນຂັ້ນຕໍ່ໄປ; ແລະ ຈະປັບປຸງການສິດສອນຂອງທ່ານແນວໃດ.

ຕົວຢ່າງ ມາຕຣິສ ການແຕ່ງບົດສອນ.

ມື້	ຈຸດປະສົງ	ວິທີການສິດສອນ	ການຈັດຕັ້ງຫ້ອງ	ກິດຈະກຳຕົ້ນຕໍ	ຊັບພະຍາກອນ	ການມີຄວາມເຫັນຍ້ອນກັບ/ ການວັດຜົນ	ການສ່ອງແສງຍ້ອນກັບ

ຈັດວາງເວລາຂອງທ່ານຢ່າງລະອຽດ.

ການສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍຈະຕ້ອງໃຊ້ເວລາ ແລະ ພະລັງງານຢ່າງຫຼວງຫຼາຍ. ຖ້າຫາກທ່ານຮູ້ສຶກຟ້າວຟັ່ງ ຫຼື ມັນເໜືອບ່າກວ່າແຮງຂອງ ທ່ານ ພ້ອມນັ້ນ ນັກຮຽນກໍຈະຮູ້ສຶກເຊັ່ນດຽວກັບທ່ານ. ໃຫ້ຈັດຕາຕະລາງເຮັດວຽກປະຈຳອາທິດ ສຳລັບ ຕົວທ່ານ ເອງ ເພື່ອຈະໄດ້ກະກຽມສິ່ງທີ່ທ່ານຈະຕ້ອງເຮັດ. ຖ້າເປັນໄປໄດ້ໃຫ້ຊອກຫາວິທີ ເພື່ອຫຼຸດຜ່ອນວຽກງານອື່ນໆລົງ, ເພື່ອ ທ່ານຈະມີເວລາຈັດການກັບຄວາມສັບສົນ ຂອງການສິດສອນຫ້ອງດັ່ງກ່າວ.

ເລີ່ມຕົ້ນຂະບວນການສິດສອນ.

ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍເລື່ອງ ວິທີທີ່ທ່ານຈະສອນແນວໃດ ແມ່ນມີຄວາມສຳຄັນກວ່າ ທີ່ທ່ານຈະສອນເລື່ອງໃດໜຶ່ງ. ທ່ານສາມາດແຕ່ງບົດສອນກ່ຽວກັບ ຫົວຂໍ້ທີ່ສຳຄັນໄດ້ຢ່າງດີເລີດ, ແຕ່ວ່າມັນກໍບໍ່ອາດປະສົບຜົນສຳເລັດໄດ້ ຖ້າຫາກທ່ານເຮັດການບັນຍາຍ ແລະ ຈັດກິດຈະກຳບໍ່ໄດ້ດີ.

ສິ່ງທ້າທາຍທີ່ໃຫຍ່ຫຼວງອັນໜຶ່ງ ໃນການສິດສອນຫ້ອງຮຽນ ທີ່ມີນັກຮຽນຈຳນວນຫຼາຍນັ້ນ ແມ່ນ“ຈະສື່ສານແນວໃດ ເພື່ອເປັນການດຶງດູດຄວາມສົນໃຈ ແລະ ກະຕຸ້ນໃຫ້ນັກຮຽນສົນໃຈຢາກຮຽນໄປພ້ອມໆກັນ, ເພື່ອທີ່ເຂົາເຈົ້າຈະໄດ້ຕັ້ງໃຈຟັງ ແລະ ຮ່ຳຮຽນຄວາມຮູ້ ແລະ ທັກສະທີ່ທ່ານ ພະຍາຍາມສອນ. ທ່ານສາມາດສື່ສານກັບນັກຮຽນຂອງທ່ານ ຢ່າງມີປະສິດທິຜົນ ໂດຍຜ່ານການ ເວົ້າຈາທີ່ດີ, ການຂຽນ ແລະ ທັກສະໃນການຟັງທີ່ດີ ພ້ອມທັງການສະແດງໃຫ້ນັກຮຽນຂອງທ່ານ ເຫັນວ່າເປັນຫຍັງສິ່ງທີ່ເຂົາເຈົ້າກຳລັງຮຽນນີ້ຈຶ່ງມີຄວາມສຳຄັນ ແລະ ເຂົາເຈົ້າສາມາດນຳໃຊ້ ມັນເຂົ້າໃນຊີວິດປະຈຳວັນຄືແນວໃດ. ຂ້າງລຸ່ມນີ້ ແມ່ນເຄື່ອງມືເພີ່ມເຕີມຈຳນວນໜຶ່ງ ເພື່ອຊ່ວຍເຫຼືອທ່ານ ໃນການສື່ສານກັບນັກຮຽນໃຫ້ ໄດ້ດີຂຶ້ນຕື່ມ ເມື່ອເລີ່ມຕົ້ນຂະບວນການສິດສອນ.

ໃຫ້ໄປຮອດຫ້ອງຮຽນແຕ່ເຊົ້າ. ການສື່ສານເລີ່ມຕົ້ນເມື່ອເວລາ ທ່ານ ແລະ ນັກຮຽນຢູ່ໃນຫ້ອງດຽວກັນ. ມີຄູສອນຈຳນວນໜຶ່ງໄປຮອດຫ້ອງຮຽນພໍດີກັບເວລາການສອນຈະເລີ່ມຕົ້ນ ຫຼື ຫຼັງການໂມງ, ອາດເປັນຍ້ອນວ່າ ຄູຄົນນັ້ນມີຄວາມຢ້ານກົວຕໍ່ການສອນນັກຮຽນຫຼາຍຄົນ ຫຼືວ່າ ອາດມີວຽກແນວອື່ນ. ການມາຮອດຫ້ອງຮຽນຊ້າ ຫຼືວ່າ ມາຮອດແບບຟ້າວຟັ່ງນັ້ນ ເປັນການສື່ໃຫ້ນັກຮຽນຄິດວ່າ ທ່ານອາດຈະ ບໍ່ມີຄວາມກະຕືລືລົ້ນກ່ຽວກັບການສອນເຂົາເຈົ້າ. ທ່ານເລີ່ມຕົ້ນເຮັດໃຫ້ເຂົາເຈົ້າຂາດຄວາມສົນໃຈນັບ ຕັ້ງແຕ່ບໍ່ທັນເລີ່ມສອນຊ້ຳ. ເຖິງຢ່າງໃດກໍດີ, ການມາຮອດຫ້ອງຮຽນແຕ່ເຊົ້າຈະເຮັດໃຫ້ມີຄວາມງ່າຍດາຍໃນການເລີ່ມການສິດສອນ, ມີເວລາພັກຜ່ອນໜ້ອຍໜຶ່ງ, ກ່ອນຈະເຮັດໃຫ້ນັກຮຽນຫຼາຍຄົນໃຫ້ຄວາມສົນໃຈທ່ານ, ຍິ່ງໄປກວ່ານັ້ນ, ຖ້າຫາກທ່ານມາຮອດຫ້ອງຮຽນກ່ອນ 10 ນາທີ ທ່ານອາດຈະເຮັດ ໃຫ້ນັກຮຽນຫຼາຍຄົນມາໂຮງຮຽນແຕ່ເຊົ້າເຊັ່ນດຽວກັນ, ຊຶ່ງມັນຈະຫຼຸດຜ່ອນ ຄວາມສັບສົນ ແລະ ວຸ້ນວາຍ ຂອງນັກຮຽນທີ່ມາພ້ອມກັນບາດດຽວ.

ເຮັດໃຫ້ນັກຮຽນມີຄວາມຕັ້ງໃຈແຕ່ຕອນເລີ່ມຕົ້ນສອນ. ເມື່ອເວລາການສອນເລີ່ມຕົ້ນ, ສິ່ງທ້າທ້າຍອັນທຳອິດ ແມ່ນການເຮັດໃຫ້ນັກຮຽນທຸກຄົນຕັ້ງໃຈເລັ່ງຈຸດສຸມໃສ່ທ່ານ ແລະ ຫົວຂໍ້ທີ່ທ່ານຈະສອນ. ສິ່ງທີ່ຈຳເປັນທີ່ສຸດແມ່ນໃຫ້ມີ "ຄວາມຕັ້ງໃຈ" ການເຮັດໃຫ້ເດັກມີຄວາມຕັ້ງໃຈບໍ່ຈຳເປັນວ່າ ຈະ ຕ້ອງເປັນຕ້ອງສະແດງຄວາມລ່າເລີ່ງ, ມັນອາດເປັນວິທີງ່າຍໆເຊັ່ນ ການຕັ້ງຄຳຖາມທີ່ໜ້າສົນໃຈ ຫຼື ສ້າງຄຳເວົ້າໃດໜຶ່ງຂຶ້ນມາແລ້ວບອກນັກຮຽນຕອບ. ຕົວຢ່າງ ຖ້າຫາກຢາກສົນທະນາເລື່ອງການປະກອບອາຊີບ ແລະ ຕ້ອງການຢາກເອົາເລື່ອງບົດບາດຍິງ - ຊາຍເຂົ້າຢູ່ໃນນັ້ນ, ທ່ານອາດເລີ່ມຕົ້ນການສິດສອນດ້ວຍການເວົ້າວ່າ "ເມື່ອເວລາຄູຍ່າງມາໂຮງຮຽນມື້ນີ້, ຄູໄດ້ເຫັນພໍ່ແມ່ຂອງພວກນ້ອງຫຼາຍຄົນເຮັດວຽກ. ຄູໄດ້ເຫັນແມ່ຂອງພວກນ້ອງເຮັດອາບນ້ຳໄມເຮືອນ ແລະ ແຕ່ງກິນ, ໃນຂະນະນັ້ນຄູໄດ້ເຫັນພໍ່ຂອງ ພວກນ້ອງໄປທີ່ງນາ. ເປັນຫຍັງແມ່ຂອງພວກນ້ອງຈຶ່ງເຮັດໜ້າທີ່ການດູແລເຮືອນຊານ ແລະ ພໍ່ຂອງພວກ ນ້ອງຕ້ອງໄປເຮັດວຽກນອກບ້ານ? ເປັນຫຍັງ ພໍ່ຂອງພວກນ້ອງຈຶ່ງບໍ່ອະນາໄມເຮືອນ ແລະ ແມ່ຂອງພວກ ນ້ອງຈຶ່ງບໍ່ໄປເຮັດວຽກຢູ່ທີ່ງນາ. ສຳລັບນັກຮຽນທີ່ນ້ອຍກວ່າທ່ານອາດຖາມວ່າ "ເຄື່ອງຫຼິ້ນທີ່ນ້ອງມັກແມ່ນ ຫຍັງ? ມີເດັກຊາຍຈັກຄົນມັກຫຼິ້ນຕຸກກະຕາ? ມີເດັກຍິງຈັກຄົນມັກຫຼິ້ນລົດ? ເປັນຫຍັງນ້ອງຈຶ່ງມັກເຄື່ອງ ຫຼິ້ນປະເພດນີ້? ຖ້າທ່ານສອນກ່ຽວກັບລະດູການ ແລະ ໝາກໄມ້ຕາມລະດູການ, ທ່ານສາມາດຕັ້ງຄຳຖາມ "ຖ້າຫາກໝາກໂມສາມາດປາກໄດ້, ມັນຈະເວົ້າຫຍັງກ່ຽວກັບເວລາ ແລະ ສະຖານທີ່ທີ່ມັນຖືກປູກ ແລະ ເກັບກ່ຽວ?" ຖ້າຫາກທ່ານສອນວິທະຍາສາດ ໃຫ້ບອກນັກຮຽນເອົາເຄື່ອງມື ຫຼື ຊິ້ນສ່ວນອຸປະກອນ ທີ່ສາມາດສາທິດຫຼັກເກນຂອງບົດຮຽນໃນມື້ນັ້ນ. ບອກໃຫ້ນັກຮຽນເວົ້າ ກ່ຽວກັບ ຄອບຄົວ ຂອງເຂົາເຈົ້າ ໃນການນຳໃຊ້ເຄື່ອງມືນັ້ນ. ນຳໃຊ້ຂໍ້ມູນຂ່າວສານນີ້ ເພື່ອເລີ່ມຕົ້ນບົດຮຽນ ແລະ ເຮັດໃຫ້ນັກຮຽນມີຄວາມ ຕັ້ງໃຈ.

ເນັ້ນໜັກຂໍ້ມູນຂ່າວສານທີ່ສຳຄັນໃນຕອນເລີ່ມຕົ້ນ, ໄລຍະກາງ ແລະ ຕອນທ້າຍ ການສອນ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ມີໂອກາດຫຼາຍທີ່ສຸດ ທີ່ນັກຮຽນຈຳນວນໜຶ່ງບໍ່

ໄດ້ຍິນ ຫຼື ບໍ່ຮູ້ວ່າ ຂໍ້ມູນອັນໃດມີຄວາມສຳຄັນສຳລັບບົດຮຽນ. ຍິ່ງໄປກວ່ານັ້ນ, ຜົນຂອງການວິໄຈໄດ້ຊີ້ໃຫ້ເຫັນວ່າ ນັກຮຽນສາມາດຈື່ຈຳຂໍ້ມູນໄດ້ດີກວ່າໝູ່ໝົດ ແມ່ນໃນຕອນເລີ່ມຕົ້ນຂອງການສິດສອນ. ຄວາມສາມາດໃນການຈື່ຈຳຂອງເຂົາຈະຫຼຸດລົງໄປເລື້ອຍໆ ໃນໄລຍະຕໍ່ມາແລ້ວກໍຈະເພີ່ມຂຶ້ນອີກໜ້ອຍໜຶ່ງໃກ້ຕອນສຸດທ້າຍຂອງບົດຮຽນ ຊຶ່ງເຂົາເຈົ້າໃຫ້ຄວາມສົນໃຈວ່າຈະຮອດເວລາພັກ. ສະນັ້ນ ຖ້າເປັນໄປໄດ້ຕ້ອງ ໃຫ້ແນ່ໃຈວ່ານັກຮຽນທຸກຄົນຮູ້ວ່າແມ່ນຂໍ້ມູນອັນໃດແດ່ ທີ່ສຳຄັນຕັ້ງແຕ່ຫົວທີ ຊຶ່ງມັນເປັນເລື່ອງທີ່ສຳຄັນ ສຳລັບການສອນຢູ່ໃນຫ້ອງຮຽນ ທີ່ມີນັກຮຽນຈຳນວນຫຼາຍ. ໃນຕອນເລີ່ມຕົ້ນບົດຮຽນ ແລະ ຫວັງວ່າ ໃນຕອນທີ່ເດັກຕັ້ງໃຈຟັງຄູບາງຄົນຈະແຈ້ງໃຫ້ນັກຮຽນຮູ້ເຖິງຄວາມສຳຄັນຂອງແນວຄວາມຄິດ ຫຼື ແນວຄິດ ກ່ອນການນຳສະເໜີບົດຮຽນ, ດັ່ງຕົວຢ່າງ, ເຂົາເຈົ້າອາດເວົ້າວ່າ “ອັນນີ້ແມ່ນສຳຄັນແທ້, ດັ່ງນັ້ນ ພວກນ້ອງຈຳເປັນຕ້ອງໃຫ້ຄວາມເອົາໃຈໃສ່. ທຸກຄົນກຽມພ້ອມແລ້ວບໍ?” ການຂຽນຈຸດສຳຄັນໃສ່ກະດານ ເພື່ອໃຫ້ທຸກຄົນເຫັນກໍເປັນການຊ່ວຍ ເພື່ອຮັບປະກັນໃຫ້ທ່ານໄດ້ສື່ສານກັບນັກຮຽນຂອງທ່ານ. ໃຫ້ວາງແຜນການອະທິບາຍຢ້ຳຄືນ ຈຸດສຳຄັນຫຼາຍໆຄັ້ງໃນໄລຍະເວລາການສິດສອນບົດຮຽນ ຍ້ອນວ່າການອະທິບາຍໃນຄັ້ງດຽວຈະບໍ່ສາມາດເຮັດໃຫ້ນັກຮຽນທຸກຄົນເຂົ້າໃຈແຈ້ງໄດ້.ໃນຕອນທ້າຍຂອງການບັນລະຍາຍ ຫຼື ຕອນທ້າຍຂອງຊົ່ວໂມງສອນມັນຈະເປັນການດີເຊັ່ນດຽວກັນ ຖ້າຫາກທ່ານສະຫຼຸບຈຸດສຳຄັນ ໂດຍເວົ້າວ່າ “ສິ່ງທີ່ສຳຄັນທີ່ສຸດ ທີ່ຈະຕ້ອງຈື່ຈຳຢູ່ໃນນີ້ແມ່ນ...”. ທ່ານສາມາດດຳເນີນກິດຈະກຳ ຫຼື ສົນທະນາ ໃນຕອນທ້າຍຂອງບົດຮຽນ ຊຶ່ງເປັນການຊ່ວຍໃຫ້ຈຸດປະສົງຂອງບົດຮຽນມີຄວາມໜັກແໜ້ນຂຶ້ນຕື່ມ. ຕົວຢ່າງ: ຢູ່ໃນຫ້ອງຮຽນ ທີ່ມີນັກຮຽນຈຳນວນຫຼາຍ ໃຫ້ສຸ່ມເອົານັກຮຽນ 5-10 ຄົນ ໃນຕອນທ້າຍຂອງການສອນແຕ່ລະຕອນ ເພື່ອພັນລະນາສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ນຳສະເໜີຄຳຖາມ ທີ່ເຂົາເຈົ້າມີກໍຄືເຮັດ ການສະເໜີວ່າເຂົາເຈົ້າ ແລະ ໝູ່ເພື່ອນຮ່ວມຫ້ອງຈະຮຽນໄດ້ດີກວ່ານີ້ແນວໃດ.

ນຳໃຊ້ຕົວຢ່າງທີ່ສອດຄ່ອງ. ເມື່ອເວລາເຮັດການສິດສອນ, ທ່ານຄວນນຳໃຊ້ຕົວຢ່າງທີ່ສອດຄ່ອງຫຼາຍກວ່າການເວົ້າຊ້ຳຄືນຂໍ້ມູນທີ່ມີຢູ່ໃນປຶ້ມແບບຮຽນ. ບົດຮຽນຂອງທ່ານຄວນສະແດງໃຫ້ເຫັນແນວຄວາມຄິດຂອງປຶ້ມແບບຮຽນໂດຍນຳໃຊ້ ຕົວຢ່າງຂອງໂລກຕົວຈິງ. ຜົນຂອງການວິໄຈໄດ້ສະແດງໃຫ້ ເຫັນວ່າຄຸນລັກສະນະອັນສຳຄັນຂອງຄູສອນທີ່ມີປະສິດທິຜົນ ແມ່ນຄວາມອາດສາມາດໃນການຮັບເອົາແນວຄວາມຄິດທີ່ຍາກ ແລະ ປັບປ່ຽນຮູບແບບຂອງປະເດັນນັ້ນຕາມວິທີທີ່ສາມາດເຮັດໃຫ້ນັກຮຽນເຂົ້າໃຈ ໂດຍການນຳໃຊ້ຕົວຢ່າງ. ສ້າງຕົວຢ່າງທີ່ຖອດອອກມາຈາກປະສົບການຂອງນັກຮຽນ ຫຼື ສອດຄ່ອງກັບຊີວິດຂອງເຂົາເຈົ້າ. ຕົວຢ່າງ ເຊື່ອມໂຍງການປ່ຽນແປງຂອງລະດູການໃສ່ກັບເວລາທີ່ໝາກໄມ້ ຫຼື ການ ເກັບກ່ຽວທີ່ໄດ້ຜົນດີ ແລ້ວເຊື່ອມໂຍງສິ່ງດັ່ງກ່າວນີ້ໃສ່ການປ່ຽນແປງລະບົບສະພາບດິນຟ້າອາກາດ. ໃຫ້ນຳໃຊ້ຕົວຢ່າງຫຼາຍໆອັນ ເພື່ອສະແດງໃຫ້ເຫັນປະກົດການອັນດຽວກັນ ເຊັ່ນ ມີວັດຖຸຫຼາຍຢ່າງທີ່ເປັນຮູບມົນ. ເມື່ອທ່ານນຳໃຊ້ຕົວຢ່າງຕ່າງໆ, ແມ່ນທ່ານໄດ້ເພີ່ມໂອກາດໃຫ້ນັກຮຽນທຸກຄົນໄດ້ເຂົ້າໃຈ. ທ່ານອາດປ່ຽນແປງແນວຄວາມ

ຄິດ ຫຼື ຮູບພາບນັ້ນມາເຮັດໃຫ້ເປັນສິ່ງທີ່ໜ້າຕື່ນເຕັ້ນ. ຕົວຢ່າງ: ຖ້າທ່ານ ກຳລັງເວົ້າກ່ຽວກັບຫົວໃຈ ກໍໃຫ້ສົມທຽບມັນໃສ່ຂະໜາດ ຂອງ ກຳປັ້ນຂອງທ່ານ.

ສິ່ງທີ່ຄວນຈື່: ການເລືອກເອົາຕົວຢ່າງມີຄວາມສຳຄັນທີ່ສຸດ. ນັກຮຽນຈະສາມາດຈື່ຈຳ ແລະ ຟັງ ທ່ານ ຫຼາຍຂຶ້ນ ຖ້າຫາກວ່າຕົວຢ່າງນັ້ນມັນກ່ຽວກັບປະສົບການ (ສັ້ນ ແລະ ເຮັດໃຫ້ສະ ໜຸກ ກ່ຽວກັບເຫດການຈິງ ຫຼື ຄົນຕົວຈິງ), ແມ່ນກ່ຽວກັບຕົວເຮົາເອງ, ສອດຄ່ອງ ຫຼື ມີອາລົມຂັນ.

ໃຫ້ພິຈາລະນາຊອກຫາວິທີການຮ່ຳຮຽນແບບຕ່າງໆ.ນັກຮຽນຮ່ຳຮຽນໃນວິທີການຕ່າງໆຍ້ອນ ອົງປະກອບທາງພັນທຸກຳ, ປະສົບການ, ສະພາບແວດລ້ອມ ຫຼື ບຸກຄະລິກລັກນະສ່ວນຕົວ. ໃນ ຫຼາຍປີຜ່ານມາພວກເຮົາໄດ້ຮຽນຮູ້ວ່າ 30% ຂອງຈຳນວນນັກຮຽນສາມາດຮ່ຳຮຽນໄດ້ຢ່າງມີຜົນ ສຳເລັດ ເມື່ອ ເຂົາເຈົ້າໄດ້ຍິນສິ່ງໃດສິ່ງໜຶ່ງ, 33% ຮຽນໄດ້ຜົນເມື່ອເຂົາເຈົ້າໄດ້ເຫັນ ແລະ 37% ຮຽນໄດ້ຜົນ ໂດຍຜ່ານການເຄື່ອນໄຫວ ຄືດັ່ງຜູ້ເຖົ້າເວົ້າວ່າ “ຂ້ອຍໄດ້ຍິນ ແລະ ຂ້ອຍລືມ , ຂ້ອຍໄດ້ເຫັນ ແລະ ຂ້ອຍຈື່, ຂ້ອຍເຮັດ ແລະ ຂ້ອຍເຂົ້າໃຈ”. ອັນນີ້ແມ່ນສຳຄັນທີ່ສຸດ! ຖ້າພວກເຮົາ ພຽງແຕ່ສອນ ໂດຍໃຫ້ເຂົາເຈົ້າຟັງແຕ່ເຮົາ, ແລ້ວມີນັກຮຽນພຽງປະມານໜຶ່ງສ່ວນສາມເທົ່ານັ້ນ ທີ່ ຮຽນສິ່ງໃດສິ່ງໜຶ່ງ. ກໍຍັງມີສະພາບຄືດຽວກັນນີ້ ເມື່ອເວລາເຮົາບອກນັກຮຽນຂຽນສິ່ງໃດໜຶ່ງລົງ ໃນປຶ້ມຂຽນພຽງຢ່າງດຽວ. ດັ່ງນັ້ນມັນຈຶ່ງເປັນສິ່ງສຳຄັນທີ່ຈະອອກແບບວິທີການຕ່າງໆ ຂອງການສື່ ສານຂໍ້ມູນທີ່ສາມາດຊັກຊວນຜູ້ຮຽນດ້ວຍໃຈມັກ, ເຊັ່ນ ການຂຽນບົດ, ເຮັດການທົດລອງແກ້ໄຂ ບັນຫາ, ແຕ້ມ, ຫຼິ້ນເກມ, ຫຼິ້ນດົນຕຣີ, ເຮັດກິດ ຈະກຳເປັນກຸ່ມ ແລະ ເປັນລາຍບຸກຄົນ ແລະ ອື່ນໆ.

ນຳໃຊ້ຄວາມຫຼາກຫຼາຍຂອງວິທີການສິດສອນ.

ນັກຮຽນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍຈະມີຄວາມຕັ້ງໃຈ ແລະ ທ່າແຮງຂອງ ການຮ່ຳຮຽນຈະເພີ່ມຂຶ້ນ ເມື່ອເວລາເຂົາເຈົ້າໄດ້ພົບກັນຄວາມຫຼາກຫຼາຍ ຂອງວິທີການສິດສອນ ແລະ ປະສົບການຂອງການຮ່ຳຮຽນຄືດັ່ງຕໍ່ໄປນີ້. ບໍ່ມີວິທີການສິດສອນອັນໃດດີທີ່ສຸດ ວິທີທັ້ງໝົດ ນັ້ນ ຈະຊ່ວຍສະໜັບ ສະໜູນຊຶ່ງກັນ ແລະ ກັນ.

ການບັນລະຍາຍ. ການບັນລະຍາຍ ອາດຈະເປັນວິທີທີ່ເກົ່າກວ່າໝູ່ ແລະ ກໍຍັງໃຊ້ກັນຫຼາຍ ຢູ່ໃນ ວິທີການສິດສອນ ແລະ ກໍເປັນວິທີໜຶ່ງທີ່ໃຊ້ເລື້ອຍໆ ໃນການສິດສອນຢູ່ໃນຫ້ອງ ທີ່ມີນັກຮຽນຈຳ ນວນຫຼາຍ. ການສອນແບບບັນລະຍາຍມີຈຸດແຂງຫຼາຍອັນ ແລະ ກໍຄືມີຈຸດອ່ອນເຊັ່ນດຽວກັນ. ບັນ ດາຈຸດແຂງປະກອບມີສິ່ງຕໍ່ໄປນີ້:

- ການບັນລະຍາຍສາມາດສື່ສານເລື່ອງທີ່ເປັນໜ້າສົນໃຈຂອງວິຊາທີ່ທ່ານໄດ້ສິດສອນ ໄດ້ຢ່າງຫ້າວຫັນ. ຄູສອນສາມາດສະແດງຄວາມກະຕືລືລົ້ນຂອງຕົນ ດ້ວຍວິທີການທີ່ບໍ່ ມີປຶ້ມ, ບໍ່ມີສື່ການສອນ ຫຼື ກິດຈະກຳໃດໆ. ຄວາມກະຕືລືລົ້ນກະຕຸ້ນຄວາມສົນໃຈ ແລະ ນັກຮຽນຜູ້ທີ່ມີ ຄວາມສົນໃຈ ໄດ້ຮັບການກະຕຸກຊຸກຍູ້ໃຫ້ມີທ່າອ່ຽງຢາກຮຽນຫຼາຍຂຶ້ນ.

- ການບັນຍາຍສາມາດນຳໃຊ້ເພື່ອຈັດສັນອຸປະກອນການສອນໃນວິທີທາງພິເສດໃດໜຶ່ງ. ການບັນລະຍາຍ ອາດເປັນວິທີການໄວ ແລະ ງ່າຍດາຍຂອງການນຳສະເໜີຂໍ້ມູນຕໍ່ນັກຮຽນ. ການບັນລະຍາຍເປັນປະໂຫຍດ ໂດຍສະເພາະ ສຳລັບນັກຮຽນຜູ້ທີ່ອ່ານບໍ່ເກັ່ງ ຫຼື ຜູ້ບໍ່ ສາມາດຈັດສັນອຸປະກອນສິ່ງພິມ.
- ການບັນລະຍາຍເຮັດໃຫ້ການຄວບຄຸມຂອງຄູສອນໄດ້ຜົນສູງສຸດ. ຮູບແບບຂອງການບັນຍາຍ ເຮັດໃຫ້ຄູສອນເຮັດການຄວບຄຸມບາດກ້າວການສອນ, ຄວາມຖືກຕ້ອງ ແລະ ຂອບເຂດຂອງອຸປະກອນທີ່ໄດ້ນຳສະເໜີ. ການບັນລະຍາຍສາມາດສະເໜີຂໍ້ມູນທີ່ເປັນຈິງໄດ້ເປັນຈຳນວນ ຫລວງຫລາຍ ໃນຂອບເຂດເວລາທີ່ຈຳກັດ.
- ການບັນລະຍາຍສາມາດເວົ້ານຳຜູ້ຟັງຫຼາຍໆຄົນໄດ້ໃນເວລາດຽວກັນ.
- ການບັນລະຍາຍເຮັດໃຫ້ນັກຮຽນມີຄວາມຍ້ານກົວໜ້ອຍທີ່ສຸດ, ເນື່ອງຈາກວ່າເຂົາເຈົ້າບໍ່ຖືກຮຽກຮ້ອງໃຫ້ເຮັດອັນໃດອັນໜຶ່ງ ຊຶ່ງເປັນສິ່ງທີ່ເຂົາເຈົ້າມັກ.
- ການບັນລະຍາຍເນັ້ນໜັກການຮຽນຮູ້ແບບການຟັງ, ເປັນສິ່ງທີ່ດີ ສຳລັບນັກຮຽນທີ່ຮຳຮຽນແບບວິທີນີ້ໄດ້ດີ.

ເຖິງຢ່າງໄດ້ກໍດີມີນັກວິໄຈ ແລະ ຄູສອນທີ່ມີຈຳນວນເພີ່ມຂຶ້ນເລື້ອຍໆ ໄດ້ກຳນົດຈຸດອ່ອນຂອງ ການເຮັດບັນລະຍາຍແບບດັ່ງເດີມຕໍ່ໄປນີ້:

- ການບັນລະຍາຍເຮັດໃຫ້ນັກຮຽນນັ່ງຢູ່ແບບເສີຍໆ ແທນທີ່ຈະຫ້າວຫັນຕັ້ງໜ້າຮຽນ. ບົດບາດມີປະສິດທິຜົນໜ້ອຍກວ່າການຮຽນແບບຕັ້ງໜ້າ ຊຶ່ງເປັນການສົ່ງເສີມການຄົ້ນຄິດ ຫຼື ປ່ຽນແປງທັດສະນະຄະຕິ.
- ການບັນລະຍາຍຊຸກຍູ້ໃຫ້ມີການສື່ສານທາງດຽວ. ຂາດການໃຫ້ຂໍ້ມູນຍ້ອນກັບ ກ່ຽວກັບການຮຳຮຽນຂອງນັກຮຽນ ລວມທັງ ຄູສອນ ແລະ ນັກຮຽນ.
- ການບັນລະຍາຍຮຽກຮ້ອງໃຫ້ມີທັກສະ ໃນການເວົ້າຢ່າງມີປະສິດທິຜົນ ແລະ ການໃຊ້ສຽງ ຊຶ່ງຜ່ານມາບໍ່ໄດ້ເນັ້ນໜັກຢູ່ໃນຫຼັກສູດ ຂອງການສ້າງຄູ.
- ການບັນລະຍາຍເຮັດໃຫ້ມີພາລະແບກຫາບວຽກງານການຈັດວາງ ແລະ ສັງເຄາະເນື້ອໃນການສອນແກ່ຄູພຽງຜູ້ດຽວ ໂດຍບໍ່ມີນັກຮຽນເຂົ້າຮ່ວມນຳ (ມີການຮຽນຮູ້ໜ້ອຍ).
- ການບັນລະຍາຍ ສັນນິຖານວ່ານັກຮຽນທຸກຄົນຮຽນໄປໃນວິທີທາງດຽວກັນ ໃນບາດກ້າວອັນດຽວກັນ ແລະ ມີຄວາມເຂົ້າໃຈໃນລະດັບດຽວກັນ, ຊຶ່ງມັນບໍ່ແມ່ນຄວາມຈິງ.
- ການບັນລະຍາຍມີທ່າອ່ຽງຈະລືມໄວ, ນັກຮຽນສ່ວນຫຼາຍ ຮັບຟັງຢ່າງບໍ່ມີປະສິດທິຜົນໃນການບັນລະຍາຍແບບຍາວໆ (ດົນກວ່າ 15 ນາທີຂຶ້ນໄປ).

ຖ້າຫາກທ່ານເລືອກຈະເຮັດການບັນລະຍາຍໃຫ້ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ໃຫ້ທ່ານຈື່ຈຸດສຳຄັນດັ່ງຕໍ່ໄປນີ້. ຈຳນວນໜຶ່ງໄດ້ອະທິບາຍມາກ່ອນແລ້ວ ແຕ່ວ່າ ກໍເປັນການດີທີ່ຈະສະເໜີສິ່ງ ດັ່ງກ່າວຢູ່ໃນທີ່ນີ້ອີກ ຍ້ອນວ່າ ມັນໄດ້ພັດທະນາເພີ່ມຂຶ້ນ.

- ໃຫ້ທຳໃຈແບບສະບາຍໆກັບອຸປະກອນການສິດສອນຂອງທ່ານ.
- ວາງແຜນເຮັດການບັນລະຍາຍທີ່ສັ້ນ ໂດຍໃຫ້ມີກິດຈະກຳຂອງນັກຮຽນເຂົ້າຊ່ວຍ.
- ໃນຕອນເລີ່ມຕົ້ນຂອງການບັນລະຍາຍ ໃຫ້ຕັ້ງຄຳຖາມໄວ້ ເພື່ອຈະໃຫ້ນັກຮຽນຕອບ ໃນຕອນທ້າຍຂອງໂມງບັນລະຍາຍ ຫຼື ນຳໃຊ້ປະເພດຂອງຜູ້ຕ້ອງການຄວາມເອົາໃຈໃສ່ ແລະ ແບບ ອື່ນໆ ເຊັ່ນ ເວົ້າເລື່ອງສັ້ນ ຫຼື ເລົ່ານິທານຊວນຫົວ ຫຼື ເລື່ອງຕະຫລົກ.
- ອະທິບາຍພາບລວມຂອງການບັນລະຍາຍ (ຫຼື ຈຸດປະສົງຂອງການຮ່ຳຮຽນ ຂອງບົດຮຽນ) ໃຫ້ຂຽນຈຸດສຳຄັນ ຫຼື ຂອບເຂດທີ່ຈະສິນທະນາໃສ່ກະດານດຳ ຫຼື ເຈ້ຍປັສເຕີ, ອັນນີ້ແມ່ນ “ຮ່າງແຜນການ” ຂອງການບັນລະຍາຍຂອງທ່ານ ແລະ ນັກຮຽນສາມາດ ອີງໃສ່ຮ່າງແຜນ ການນີ້ໃນເມື່ອທ່ານບັນລະຍາຍ.
- ໃຫ້ອະທິບາຍເລື່ອງການພົວພັນຂອງຫົວຂໍ້ການບັນລະຍາຍໃສ່ກັບໂລກຕົວຈິງ ແລະ ໃສ່ກັບຊີວິດປະຈຳວັນຂອງນັກຮຽນ ກໍຄື ການພົວພັນກັບການບັນລະຍາຍທີ່ເຮັດຜ່ານມາ ແລະ ອຸປະກອນການສິດສອນ.
  - ປ່ຽນລະດັບການສົ່ງສຽງອອກ (ເຊັ່ນ ເພີ່ມສຽງຂຶ້ນ ຫຼື ຜ່ອນສຽງລົງ) ຜັນສຽງໃຫ້ແຈ້ງ, ເວົ້າຢູ່ໃນຈັງຫວະທີ່ເໝາະສົມ (ເຊັ່ນ ເວົ້າຊ້າລົງ ແລະ ເວົ້າລົ້ມຄືນຈຸດທີ່ສຳຄັນ).
  - ຍ່າງອອກທາງຫຼັງຂອງໂຕະ ແລະ ຍ່າງລົງໄປຫາແຖວໂຕະນັກຮຽນ ແລະ ໄປໃກ້ໆ ນັກຮຽນ ຖ້າຫາກວ່າເວລາໃດມີໂອກາດ.
  - ໃຫ້ເວົ້າຕໍ່ໜ້ານັກຮຽນ, ບໍ່ໃຫ້ເວົ້າໃສ່ກະດານດຳ, ຝາຫ້ອງ, ປື້ມ ຫຼື ພື້ນຫ້ອງຮຽນ ແລະ ຮັກສາລະດັບ ການສົບສາຍຕາກັບນັກຮຽນ.
  - ນຳໃຊ້ອາລົມຂັນ ຫຼື ວິທີອື່ນໆ ເພື່ອສະແດງໃຫ້ເຫັນຄວາມກະຕືລືລົ້ນຂອງບົດຮຽນ ຫຼື ແນວຄິດຂອງບົດຮຽນ.
- ໃຫ້ຖາມ ແລະ ຕອບຄວາມເຫັນຍ້ອນກັບຈາກນັກຮຽນໂດຍ:
  - ສົບສາຍຕາເບິ່ງນັກຮຽນ ໃນເວລາເຮັດການບັນລະຍາຍ ເພື່ອເບິ່ງວ່ານັກຮຽນ ເອົາໃຈໃສ່ບໍ, ເຂົ້າໃຈບໍ ຫຼື ເຫັນດີນຳທ່ານບໍ.
  - ຊຸກຍູ້ໃຫ້ນັກຮຽນຕອບໂດຍຕັ້ງຄຳຖາມສະເພາະເຊັ່ນວ່າ “ມີຜູ້ໃດບອກຄູໄດ້ບໍວ່າ ເວລາໃດ ພວກເຮົານຳ ໃຊ້ວິຊາຄະນິດສາດ ຢູ່ໃນຊີວິດປະຈຳວັນຂອງພວກເຮົາ?”
  - ເອົານັກຮຽນເຂົ້າມາມີສ່ວນຮ່ວມ, ເຖິງແມ່ນວ່າຫ້ອງຮຽນຈະມີນັກຮຽນຈຳນວນຫຼາຍກໍຕາມ, ໂດຍບອກນັກຮຽນຍົກມືຂຶ້ນ ໃຊ້ເຈ້ຍບັດທີ່ມີສີແຕກຕ່າງກັນ ເພື່ອບົ່ງບອກເຖິງຄຳຕອບຕ່າງກັນ. ກໍເຄີຍໄດ້ຜົນເລື້ອຍໆ ທີ່ເອີ້ນນັກຮຽນຜູ້ທີ່ໃຫ້ຄຳຕອບຖືກ ແລະ ໃຫ້ເຂົາອະທິບາຍຄຳຕອບນັ້ນ.
  - ນຳໃຊ້ການຍ້ອງຍໍສັນລະເສີນ. ການໃຫ້ຄວາມເຫັນໃນທາງບວກ ເມື່ອມີເຫດຜົນພຽງພໍ ມັນຈະເປັນການຊຸກຍູ້ການຮ່ຳຮຽນເພີ່ມຂຶ້ນ.

- ໃຫ້ເນັ້ນຢ້ຳຈຸດສຳຄັນຄືນໃໝ່ໃນຕອນທ້າຍຂອງການບັນລະຍາຍ ຫຼື ບອກໃຫ້ນັກຮຽນ ສະຫລຸບຫຍໍ້ແນວຄວາມຄິດທີ່ສຳຄັນ ຂອງການບັນລະຍາຍ (ສິ່ງນີ້ອາດບອກໃຫ້ທ່ານຮູ້ ຢ່າງໄວວ່າ ນັກຮຽນໄດ້ຮຽນຮູ້ອັນໃດ ແລະ ອັນໃດແດ່ທີ່ບໍ່ໄດ້ຈື່ຈຳ ເພື່ອທ່ານສາມາດ ປັບປຸງການບັນ ລະຍາຍຂອງທ່ານໃນຄັ້ງຕໍ່ໄປ).
- ໃຫ້ນັກຮຽນຕັ້ງຄຳຖາມ ແລະ ໃຫ້ຄຳເຫັນໂດຍແບບປາກເປົ່າ ຫຼື ໂດຍຜ່ານການເຮັດສຳ ຫຼວດແບບປິດລັບ ແລ້ວສົ່ງໃຫ້ແຕ່ລະຄົນຂຽນປະກອບໃສ່ ແລ້ວສົ່ງກັບຄືນ ໃນຕອນ ທ້າຍຂອງຊົ່ວໂມງສອນ.

ຄຳຖາມ

1. ຄວນໃຫ້ເດັກມີສ່ວນຮ່ວມໃນການຈັດຕັ້ງຫ້ອງຄືແນວໃດ?
2. ການແບ່ງຄວາມຮັບຜິດຊອບໃຫ້ແກ່ເດັກຄວນເຮັດຄືແນວໃດ?
3. ຄູຄວນຮູ້ຫຍັງແດ່? ຕໍ່ກັບການກຽມການສອນ ແລະ ແຜນການສອນມີຈັກຂັ້ນຕອນ ?
4. ການສອນແບບບັນລະຍາຍມີຄືແນວໃດສຳລັບການສອນຫ້ອງຮຽນທີ່ມີນັກຮຽນຫລາຍ?

ບົດທີ 4
ການໃຊ້ຊັບພະຍາກອນທີ່ມີໃຫ້ເກີດປະໂຫຍດສູງສຸດ

ຄູ ຜູ້ທີ່ປະສົບຜົນສຳເລັດຈະຮັກສາສະພາບແວດລ້ອມ ຂອງການຮຽນຮູ້ທີ່ໜ້າຈັບໃຈ ສຳລັບ ເດັກທຸກຄົນ ໂດຍບໍ່ຄຳນຶງເຖິງອາຍຸ, ເພດ, ຄວາມສາມາດ ຫລື ພື້ນຖານ. ຫ້ອງຮຽນຂອງ ເຂົາຈະເປັນສະຖານທີ່ທີ່ໜ້າຕື່ນເຕັ້ນ ແລະ ມີການກະຕຸ້ນການຮຽນຮູ້. ເຖິງວ່າສື່ການຮຽນການ ສອນຈະຂາດເຂີນ ແລະ ສິ່ງຕົບແຕ່ງ / ໂຕະຕັ່ງຈະບໍ່ດີກໍຕາມ, ຫ້ອງຮຽນກໍສາມາດຈັດ ໃຫ້ເປັນລະ ບຽບດີ, ສະອາດດີ ແລະ ເຮັດໃຫ້ເປັນ ທີ່ໜ້າສົນໃຈດ້ວຍການໃຊ້ຫົວຄິດປະດິດສ້າງ ແລະ ຄວາມ ມຸ້ງໝັ້ນທີ່ຈະຂໍຄວາມຊ່ວຍ ເຫລືອເພື່ອປັບປຸງ. ໃນທີ່ນີ້ຈະສະເໜີແນວຄວາມຄິດບາງຢ່າງ!

ຖ້າເປັນໄປໄດ້, ໂຕະ ຫລື ຕັ່ງ ຄວນສາມາດເຄື່ອນຍ້າຍໄດ້ງ່າຍດາຍ ເພື່ອສະດວກ ໃນ ການເຮັດວຽກເປັນກຸ່ມ. ອາດໃຫ້ມີກະດານຫລາຍກວ່າໜຶ່ງແຜ່ນ ຫລື ພື້ນທີ່ຂຽນທີ່ເໝາະສົມ. ຄວນມີທີ່ຫວ່າງ ສຳລັບ ວາງສະແດງຜົນງານເດັກທີ່ເຫັນວ່າເໝາະສົມ ເພື່ອວ່າເຂົາຈະໄດ້ມີ ຄວາມພູມໃຈໃນການສະແດງ ໃຫ້ຄົນອື່ນເຫັນສິ່ງທີ່ເຂົາເຮັດນັ້ນດີຄືແນວໃດ. ອາດຈະໃຫ້ມີມຸມ ຮຽນຮູ້ ຫລື ມຸມກິດຈະກຳ ສຳລັບສະເພາະບາງວິຊາຮຽນ ຫລື ມີ “ຫ້ອງສະໝຸດ” ນ້ອຍໆກໍຍິ່ງດີ.

ພວກເຮົາອາດພົບຄວາມຫຍຸ້ງຍາກ ເພື່ອທີ່ຈະຮັກສາຫ້ອງຮຽນ ທີ່ມີການຈັດຕັ້ງເປັນລະ ບຽບ ແລະ ມີລັກສະນະກະຕຸ້ນຈູງໃຈ, ໂດຍສະເພາະຖ້າມີສັດລ້ຽງ ແລະ ຄົນມີບ່ອນຈະສາມາດ ມ້າງເພວັດຖຸອຸປະກອນຂອງຫ້ອງຮຽນໄດ້ງ່າຍດາຍ. ຍ້ອນແນວນັ້ນ ພວກເຮົາຈຶ່ງຈຳເປັນຕ້ອງເຮັດ ວຽກຮ່ວມກັບພໍ່ແມ່ຜູ້ປົກຄອງ ແລະ ຜູ້ນຳຊຸມຊົນເພື່ອປົກປັກຮັກສາສິ່ງວາງສະແດງ ແລະ ສື່ອຸປະ ກອນການຮຽນຮູ້ຕ່າງໆ. ສື່ອຸປະກອນບາງຢ່າງອາດຕ້ອງເກັບຮັກສາໄວ້ໃນກ່ອງ ຫລື ຕູ້ທີ່ປອດໄພ ທຸກໆວັນ. ເດັກອາດຈະຮັບຜິດຊອບເອົາສິ່ງຂອງຕ່າງໆ ກັບເມືອບ້ານນຳ ແລະ ເອົາກັບມາໃນມື້ ໃໝ່.

ຂໍຍົກຕົວຢ່າງ, ໂຮງຮຽນຊົນນະບົດໃນປະເທດຊັດ (Chad) ອາດຕ້ອງມີຫີບໂລຫະ/ເຫລັກ ເພື່ອເກັບຮັກສາເອກະສານ-ປຶ້ມຮຽນ ເພາະມີປວກ ແລະ ແມງໄມ້ຕ່າງໆທຳລາຍສື່ການຮຽນ-ການສອນເຫລົ່ານີ້ໄດ້ງ່າຍດາຍ.

ໃນປະເທດບັງກະລາເທດ, ກະດານຫລາຍແຜ່ນ ອາດຈະມີໃຫ້ເຫັນຢູ່ອ້ອມຫ້ອງຮຽນຕັ້ງ ຢູ່ໃນລະດັບຂອງເດັກ ເພື່ອໃຫ້ເຂົາສາມາດນັ່ງເປັນກຸ່ມ ແລະ ໃຊ້ກະດານດັ່ງກ່າວ ສຳລັບການວາງ ແຜນ, ສົນທະນາແນວຄວາມຄິດແກ້ໂຈດບັນຫາ ແລະ ອື່ນໆ. ສຳລັບໃນ ບາງຫ້ອງຮຽນ, ການ ຂາດແຄນໂຕະຕັ່ງ ກໍມີຜົນດີເໝືອນກັນ. ການມີພື້ນທີ່ວ່າງກວ້າງ ທີ່ປູດວ້ຍພົມ/ສາດພື້ນເມືອງ ທີ່ສະອາດກໍສາມາດປ່ຽນຈາກ ພື້ນທີ່ຄົ້ນຄວ້າວິທະຍາສາດມາເປັນພື້ນທີ່ສະແດງລະຄອນ ແລະ ການປະກອບເປັນກຸ່ມ ແລະ ປ່ຽນກຸ່ມກໍ ເຮັດໄດ້ງ່າຍ ໂດຍບໍ່ ລົບກວນຫ້ອງອື່ນ.

ຢູ່ໃນລັດທີ່ມີພົນລະເມືອງໜາແໜ້ນຂອງອິນເດຍ, ພື້ນທີ່ວ່າງດ້ານລຸ່ມຂອງຝາຈະຖືກທາເປັນສີດຳ ແລະ ເດັກຈະໃຊ້ເປັນທີ່ຂຽນ: ແຕ້ມດ້ວຍສໍຂຽນກະດານຂອງເຂົາ. ໂຮງຮຽນນີ້ໄດ້ຖືກສ້າງຂຶ້ນພາຍ ໃຕ້ໂຄງການການສຶກສາຊັ້ນປະຖົມຂັ້ນເມືອງຂອງອິນເດຍ ເຊິ່ງເຮັດໃຫ້ມີໂຮງຮຽນສຳລັບ ເດັກພາຍໃນຂອບເຂດ 1 ກິໂລແມັດຫ່າງຈາກທີ່ຢູ່ຂອງເຂົາ ແມ້ແຕ່ໃນເຂດຫ່າງໄກສອກຫລີກ. ອາຄານໂຮງຮຽນໄດ້ຖືກອອກແບບພິເສດ ແລະ ສ້າງຂຶ້ນດ້ວຍ ອົງປະກອບແບບເພື່ອນເດັກ ຄືດັ່ງກະດານດຳຂອງເດັກທີ່ໄດ້ ກ່າວຂ້າງເທິງ.

4.1 ພື້ນທີ່ເປົ່າວ່າງກາຍະພາບ

ຫ້ອງທີ່ຕ້ອງຍ້າຍ

ເດັກຈຳເປັນຕ້ອງສາມາດເຄື່ອນຍ້າຍໄປນັ່ງໂຕະ(ບ່ອນ) ຫລື ຕັ່ງອື່ນໄດ້ຢ່າງເສລີ ຫລື ແມ້ແຕ່ຈະປ່ຽນທີ່ນັ່ງລະຫວ່າງເດັກຢູ່ບົນພື້ນຫ້ອງໂດຍບໍ່ລົບກວນຜູ້ອື່ນ. ໃຫ້ຈັດການນັ່ງຫລາຍຮູບ ແບບ ເພື່ອວ່າທ່ານ ແລະ ເດັກຈະສາມາດຄົ້ນພົບການຈັດບ່ອນນັ່ງທີ່ດີທີ່ສຸດ ສຳລັບໝົດທັ້ງຫ້ອງ ແລະ ການເຮັດວຽກເປັນກຸ່ມນ້ອຍ.

ສິ່ງທີ່ຄວນຈື່: ເດັກພິການສາມາດເຂົ້າຫ້ອງ ແລະ ເຄື່ອນຍ້າຍໄປມາໃນຫ້ອງຮຽນສະດວກຫລືບໍ່? ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນໄດ້ນັ່ງກັບເດັກຜູ້ອື່ນໆທຸກຄົນ ແລະ ບໍ່ຖືກ ແຍກບໍ່? ເດັກຊາຍ ແລະ ເດັກຍິງໄດ້ນັ່ງນຳກັນຫລືບໍ່ ຫລືແຍກກັນ?

ແສງສະຫວ່າງ, ຄວາມຮ້ອນ ແລະ ການຖ່າຍເທອາກາດ

ໃຫ້ຈັດໂຕະ ເພື່ອບໍ່ໃຫ້ເດັກຕ້ອງນັ່ງຮຽນຕອບກັບແສງຕາເວັນ. ແສງສະຫວ່າງຄວນຈະມາຈາກດ້ານຂ້າງຂອງເດັກ.

ສະໝອງຈະຕ້ອງການອີກຊິແຊມ! ແຈຫ້ອງຮຽນອາດເປັນບ່ອນທີ່ອຶບເອົ້າທີ່ສຸດ. ຖ້າບໍ່ມີ ລົມລ່ວງອາກາດບໍ່ຖ່າຍເທໃນຫ້ອງຮຽນ, ທ່ານອາດຈຳເປັນຕ້ອງອະນຸຍາດ ໃຫ້ເດັກເຮັດກິດຈະກຳ ບາງຢ່າງຢູ່ນອກຫ້ອງຮຽນ. ໃຫ້ສັບປ່ຽນໝູນວຽນບ່ອນນັ່ງຂອງນັກຮຽນ ເພື່ອເຂົາຈະບໍ່ໄດ້ນັ່ງແຕ່ຢູ່ ແຈຫ້ອງທີ່ຂາດແສງສະຫວ່າງ ແລະ ລົມລ່ວງ.

ເດັກບາງຄົນອາດມີບັນຫາດ້ານການເຫັນ ຫລື ການຟັງ. ທ່ານຕ້ອງແນ່ໃຈວ່າເດັກທຸກຄົນ ໄດ້ຖືກທົດສອບ ແລະ ມີບ່ອນນັ່ງທີ່ເໝາະສົມ.

4.2 ມຸມຮຽນຮູ້

ເດັກໆມັກຈະເປັນຜູ້ຢາກຮູ້ຢາກເຫັນກ່ຽວກັບໂລກທຳມະຊາດທີ່ຢູ່ອ້ອມຕົວເຂົາ. ມຸມວິທະຍາສາດ ແລະ ຄະນິດສາດສາມາດທີ່ຈະກະຕຸ້ນຄວາມຢາກຮູ້ຢາກເຫັນຂອງເດັກ ແລະ ຈະເປັນການປັບ

ປຸງການຮຽນຮູ້ໃຫ້ດີຂຶ້ນ. ເດັກສາມາດທີ່ຈະເກັບຮວບຮວມ ແລະ ຈັດໃຫ້ເປັນລະບຽບສິ່ງຂອງຕ່າງ ໆ ທີ່ດຶງດູດຄວາມສົນໃຈຂອງເຂົາ ແລະ ຊັບພະຍາກອນເຫລົ່ານີ້ ອາດສາມາດທີ່ຈະມີໃຊ້ ສຳລັບ ເດັກ**ທຸກຄົນ**. ເດັກອາດຈະປູກແກ່ນພືດຕ່າງໆໃນມຸມເຫລົ່ານີ້, ຮວບຮວມຫມາກໄມ້ຊະນິດຕ່າງໆ ແລະ ວາງສະແດງວັດຖຸຕ່າງໆທີ່ເຂົາຊອກມາ ເຊັ່ນ - ເປືອກຫອຍ. ທ່ານຈຳເປັນຕ້ອງຄົ້ນຄິດຢ່າງ ລະມັດລະວັງວ່າມຸມຕ່າງໆ ຂອງການຮຽນຮູ້ຄວນຈະຈັດຢູ່ໃສຈຶ່ງຈະດີທີ່ສຸດ ເພື່ອໃຫ້**ເດັກທຸກຄົນ** ສາມາດຮຽນ/ເຮັດວຽກ ໃນພື້ນທີ່ເຫຼົ່ານີ້ໂດຍບໍ່ ຕ້ອງລົບກວນຜູ້ອື່ນ.

- ສຳລັບມຸມວິທະຍາສາດ ແລະ ທຳມະຊາດນັ້ນ ສິ່ງທີ່ມີຊີວິດ ເຊັ່ນ: ປາ ສາມາດທີ່ຈະເປັນ ສິ່ງເຫມາະສົມທີ່ສຸດ ໃນຫ້ອງຮຽນທີ່ມີລັກສະນະຕັ້ງໜ້າ. ເຖິງຢ່າງໃດກໍຕາມ, ເດັກຈຳ ເປັນຕ້ອງຮຽນຮູ້ ວິທີຮັກສາດູແລສິ່ງທີ່ມີຊີວິດ, ວິທີຫລຸດຜ່ອນການທຳຮ້າຍມັນ ແລະ ສິ່ງ ມັນກັບເຂົ້າປ່າຫລັງຈາກ ໄດ້ສຶກສາແລ້ວ ຖ້າພໍເປັນໄປໄດ້.
- ຢູ່ໃນມຸມຄະນິດສາດ, ກະປ໋ອງເປົ່າ (ມີຝາປິດ) ແລະ ຂອງ/ຫີບຫໍ່ເປົ່າ ສາມາດທີ່ຈະຈັດ ໄວ້ຕາມຖ້ານເກັບສິ່ງຂອງ. ມັນສາມາດນຳໃຊ້ເປັນອຸປະກອນການສອນ ການຮຽນສຳລັບ ນັກຮຽນ (ຍົກຕົວຢ່າງ: ການທຽບຈຳນວນ ຫລື ສະແດງຈຳນວນດ້ວຍວັດຖຸສິ່ງຂອງ) ແລະ ມັນຍັງເປັນ ບ່ອນເກັບມ້ຽນອຸປະກອນອື່ນໆອີກ ເຊັ່ນ ຫລຽນ ແລະ ທະນະບັດຕ່າງໆ. “ເງິນ” ສາມາດເຮັດຈາກເຈ້ຍແຂງ ຫລື ເຈ້ຍ ແລະ ໃຊ້ໃນກິດຈະກຳການຫລິ້ນບົດບາດ ສົມມຸດ ເຊັ່ນ ບົດການໄປ ຕະຫລາດ. ເສດວັດສະດຸvຕ່າງໆ ເຊັ່ນ ກະດາດ, ເຊືອກ, ລວດ, ແຜ່ນເທບ, ເສດເຄື່ອງແຕ່ງຕົວ ຫລື ເຄື່ອງນຸ່ງ, ປະລາສະຕິກ ແລະ ອື່ນໆ ກໍສາມາດທີ່ຈະ ເກັບທ້ອນໄວ້ທີ່ນີ້ ເພື່ອໄວ້ໃຊ້ໃນ ອະນາຄົດ.

ສິ່ງຂອງຕ່າງໆທີ່ຖືກພົບເຫັນ, ຕິດປ້າຍ, ວາງສະແດງ ແລະ ຖືກໃຊ້ໂດຍເດັກຈະຊ່ອຍ ເຮັດໃຫ້ເຂົາເຊື່ອມໂຍງລະຫວ່າງໂຮງຮຽນ, ຊີວິດປະຈຳວັນ ແລະ ຊຸມຊົນທ້ອງຖິ່ນ. ນາຍຊ່າງ ຫັດຖະກຳ ແລະ ນັກດົນຕີທ້ອງຖິ່ນກໍສາມາດທີ່ຈະມາຢ້ຽມຢາມໂຮງຮຽນ ແລະ ໂອ້ລົມກັບ ເດັກ. ບາງເທື່ອພວກເຂົາອາດສາມາດວາງສິ່ງຂອງຕ່າງໆໄວ້ໃຫ້ ເຊັ່ນ ເຄື່ອງມືຕ່າງໆ ແລະ ເຄື່ອງດົນຕີ ສຳລັບ ໃຫ້ເດັກໄດ້ສຳຫລວດຄົ້ນຄວ້າເບິ່ງ ແລະ ແຕ້ມ, ຢ່າງນ້ອຍກໍຢູ່ໃນໄລຍະ ເວລາສັ້ນໆ. ເມື່ອມີສິ່ງຂອງມີຄ່າປະໄວ້ໃຫ້ເບິ່ງກໍຕ້ອງພິຈາລະນາຢ່າງຈິງຈັງ ກ່ຽວກັບປະເດັນ ການເກັບຮັກສາບໍ່ ໃຫ້ຕົກເຮ່ຍເສຍ ຫາຍ.

ເດັກໆຄວນເຂົ້າຮ່ວມຢ່າງເຕັມທີ່ໃນການຈັດຕັ້ງ ແລະ ຈັດການກັບອຸປະກອນການຮຽນຮູ້. ອາດຈະມີການຈັດຕັ້ງກຸ່ມ, ໜ່ວຍ ຫລື ຄະນະກຳມະການທີ່ສາມາດ ປົກປັກຮັກສາມຸມຮຽນຮູ້ ຕ່າງໆ. ການມີສ່ວນຮ່ວມຂອງເດັກຈະຊ່ອຍຄຸ້ມຄອງ ອຸປະກອນການຮຽນການສອນຂອງຫ້ອງ ຮຽນ ແລະ ມັນຈະຊ່ອຍເດັກໃຫ້ໄດ້ພັດທະນາຄວາມຮັບຜິດຊອບ ແລະ ທັກສະຂອງການເປັນ ພົນລະເມືອງທີ່ມີຄຸນນະພາບ. ຄະນະກຳມະການຮັບຜິດຊອບໃນຫ້ອງຮຽນສາມາດປະກອບ

ດ້ວຍຜູ້ປະສານງານ ແລະ ເລຂາ ເຊິ່ງເປັນຜູ້ທີ່ໄດ້ຮັບຄວາມໄວ້ວາງໃຈຈາກທຸກຄົນໃນຫ້ອງ ເພື່ອຮັບຜິດຊອບຢ່າງຈິງຈັງ.

ຫ້ອງຮຽນບາງຫ້ອງຈະບໍ່ມີຂະໜາດກວ້າງພໍທີ່ຈະມີມຸມຮຽນຮູ້ແຍກຕ່າງຫາກ. ຢູ່ປະເທດຕີມໍຕາ ເວັນອອກ, ພໍ່ແມ່ຜູ້ປົກຄອງໄດ້ສານກະຕ່າ ແລະ ຕັ້ງໄວ້ຢູ່ພື້ນຫ້ອງ. ພວກເປືອກຫອຍ, ກ້ອນຫີນ, ແກ່ນພືດ ແລະ ສິ່ງອື່ນໆທີ່ໃສ່ໃນກະຕ່າສາມາດທີ່ຈະໃຊ້ໃນບົດຮຽນ ວິທະຍາສາດ ແລະ ຄະນິດສາດ. ສິ່ງສຳຄັນທີ່ສຸດກັບສື່ການຮຽນເຫລົ່ານີ້ ແມ່ນມັນຈະຖືກນຳໃຊ້ໂດຍພວກເດັກນັກຮຽນ.

4.3 ພື້ນທີ່ວາງສະແດງ

ອຸປະກອນການສອນ ແລະ ຜົນງານຂອງເດັກທີ່ຈັດວາງສະແດງໄວ້ໃນຫ້ອງຮຽນ ຈະຊ່ວຍໃຫ້ເດັກເກີດຄວາມສົນໃຈໃນການຮຽນຮູ້ ແລະ ເກີດຄວາມຮູ້ສຶກຂອງຄວາມເປັນເຈົ້າຂອງຫ້ອງຮຽນ. ພໍ່ແມ່ຜູ້ປົກຄອງກໍຈະໃຫ້ຄວາມສົນໃຈຫລາຍຂຶ້ນ ແລະ ຈະເຂົ້າໃຈດີຂຶ້ນ ກ່ຽວກັບ ວຽກງານທີ່ດຳເນີນຢູ່ໃນຫ້ອງຮຽນ. ຜົນງານຂອງເດັກ**ທຸກ**ຄົນຄວນຈັດວາງສະແດງໄວ້ຕາມຄວາມເໝາະສົມ ເພື່ອສະແດງໃຫ້ ເຫັນຄວາມສາມາດທີ່ເປັນເອກະລັກຂອງເຂົາ.

ເດັກຈະມັກເຫັນຊື່ຂອງເຂົາຕິດ ຫລື ຂຽນຢູ່ໃນຜົນງານຂອງເຂົາ ຍ້ອນວ່າມັນຈະເຮັດໃຫ້ເຂົາຮູ້ສຶກພູມໃຈ. ຄວນປ່ຽນການວາງສະແດງເປັນປະຈຳ ເພື່ອຮັກສາຄວາມສົນໃຈຂອງເດັກ ແລະ ຄວນ ອະນຸຍາດໃຫ້ເດັກແຕ່ລະຄົນໄດ້ມີຜົນງານດີໆບາງຢ່າງຖືກນຳສະແດງ ໃນແຕ່ລະພາກຮຽນ. ຜົນງານທີ່ໄດ້ນຳສະແດງ ແລະ ນຳເອົາອອກແລ້ວນັ້ນ ສາມາດທີ່ຈະນຳໃຊ້ສ້າງເປັນແຟ້ມບັນທຶກ ຜົນງານ ສຳລັບ ປະເມີນຜົນ ແລະ ເບິ່ງຄືນ.

ກະດານວາງສະແດງທີ່ໜ້າຈັບໃຈ ສາມາດເປັນສື່ການສອນທີ່ດີ ແລະ ມັນກໍຈະສະໜອງ ຈຸດເນັ້ນໜັກທີ່ມີຊີວິດຊີວາໃນຫ້ອງຮຽນ. ກະດານວາງສະແດງສາມາດເຮັດຈາກວັດສະດຸທ້ອງຖິ່ນ ເຊັ່ນ ໃບພ້າວ, ໃບປໍສາ ດ້ວຍຄວາມຊ່ວຍເຫລືອຂອງຊຸມຊົນໃນທ້ອງຖິ່ນ. ກະດານວາງສະແດງມີ ຄວາມສຳ ຄັນ ຍ້ອນວ່າມັນຈະໃຫ້ໂອກາດເພື່ອ:

- ໃຫ້ຂໍ້ມູນຂ່າວສານແກ່ນັກຮຽນ;
- ວາງສະແດງຜົນງານຂອງເດັກ ແລະ ປັບປຸງຄວາມພາກພູມໃຈໃນຕົນເອງ ຂອງເດັກ;
- ເສີມຂະຫຍາຍບົດຮຽນທີ່ທ່ານໄດ້ສອນແລ້ວ;
- ສະໜອງຂໍ້ມູນຂ່າວສານສະທ້ອນກັບກ່ຽວກັບກິດຈະກຳຕ່າງໆທີ່ສຳຄັນ ເຊັ່ນ ກິດຈະກຳ “ຊອກຮູ້” ທີ່ບ້ານ ແລະ ງານໂຄງການທີ່ຫາໃນຊຸມຊົນ;
- ຊຸກຍູ້ເດັກໃຫ້ເຮັດວຽກຮ່ວມກັນ ແລະ ຊ່ວຍເຫລືອກັນ ໂດຍບໍ່ກ່ຽວກັບພື້ນຖານ ແລະ ຄວາມ ສາມາດທີ່ແຕກຕ່າງກັນ; ແລະ

- ♦ ຮັບປະກັນເຮັດໃຫ້ເດັກທຸກຄົນສາມາດຮຽນຮູ້ຈາກຜົນງານຂອງກັນແລະກັນ.

ຖ້າຫ້ອງຮຽນຂອງທ່ານບໍ່ມີຝາທີ່ແຂງແຮງ, ທ່ານສາມາດທີ່ຈະຫ້ອຍຜົນງານທີ່ເດັກຂຽນ ຫລື ແຕ້ມໃສ່ເຊືອກທີ່ແຂວນຜ່ານຫ້ອງຮຽນ ຫລື ຕາມຝາຫ້ອງຮຽນ. ຜົນງານສາມາດທີ່ຈະຕິດໃສ່ເຊືອກ ໄດ້ຢ່າງງ່າຍດາຍດ້ວຍແຜ່ນສະກ໊ອດ, ກຣາຟ ຫລື ເຂັມໝຸດ. “ເສັ້ນຜຽກນີ້” ຍັງສາມາດໃຊ້ສຳລັບຂໍ້ມູນ ຂ່າວສານດ້ານພາສາ ແລະ ຄະນິດສາດ (“ມຸມແຂວນເພື່ອຮຽນຮູ້”).

ໃນບາງບ່ອນ ຄູໄດ້ໃຊ້ຄົນຮີ່ມເພເປັນໂຄງຮ່າງເພື່ອໝູນຕົວອັກສອນ, ຮູບພາບ ແລະ ອື່ນໆ ເພື່ອເສີມກິດຈະກຳການຮຽນພາສາ. ເຊືອກສຳລັບແຂວນອຸປະກອນປະຈັກຕາ ແມ່ນເຮັດດ້ວຍປໍສາ ຫລື ໃບກ້ວຍ. ກາວພື້ນເມືອງແມ່ນນຳມາຈາກຫມາກໄມ້. ພໍ່ແມ່ຜູ້ປົກຄອງໄດ້ຊ່ອຍເຫລືອ ວັດຖຸອຸປະກອນຫ້ອງຖິ່ນເຫລົ່ານີ້ ແລະ ພວກເຂົາກໍໄດ້ພົບເຫັນຫລາຍຢ່າງ ກ່ຽວກັບຂະບວນການຮຽນ-ການສອນ.ປັດຈຸບັນພວກເຂົາສາມາດເວົ້າລົມກັບລູກຫລານດີຂຶ້ນກ່ຽວກັບການຮຽນຮູ້ໃນໂຮງຮຽນ.

4.4 ມຸມອ່ານໜັງສື

ຫລາຍຊຸມຊົນໃນຊົນນະບົດຍັງຂາດອາຄານສະຖານທີ່ ສຳລັບຫ້ອງສະໝຸດ, ດັ່ງນັ້ນເດັກຈຶ່ງບໍ່ສາມາດເຂົ້າເຖິງປຶ້ມອ່ານຕ່າງໆໄດ້. ຫ້ອງສະໝຸດຂອງຫ້ອງຮຽນສາມາດສ້າງຂຶ້ນໄດ້ ໂດຍພຽງແຕ່ໃຊ້ກ່ອງກະດາດແຂງທີ່ຕົບແຕ່ງໃຫ້ງາມ ແລ້ວເອົາປຶ້ມອ່ານຕ່າງໆໃສ່. ເມື່ອເດັກເຮັດການຜະລິດປຶ້ມຂອງຕົນເອງ ບໍ່ວ່າຈະເປັນແບບງ່າຍໆງາມຫລືບໍ່ກໍຕາມ, ເດັກຈະພູມໃຈ ທີ່ໄດ້ເຫັນບົດເລື່ອງຂອງເຂົາໄດ້ຮັບ “ການພິມ” ຂຶ້ນມາ. ພວກເຂົາຍັງໄດ້ຮຽນຮູ້ກ່ຽວກັບວິທີເຮັດປຶ້ມອ່ານ, ຈັດປະເພດ ແລະ ວິທີຮັກສາມັນ. ທ່ານຍັງສາມາດໃຫ້ເດັກສ້າງປຶ້ມ “ຊິກແຊັກ” ປຶ້ມເຫລົ່ານີ້ແມ່ນເຮັດຈາກແຜ່ນເຈ້ຍທີ່ພັບສອງ ຫລືສາມຄັ້ງ ແລະ ມີບົດຄວາມ ໃນແຕ່ລະ “ໜ້າ”, ຄ້າຍຄືກັບແຜ່ນພັບ. ເດັກສາມາດແຕ້ມຮູບໃສ່ປຶ້ມເຫລົ່ານີ້ ແລະ ມັນອາດ ສາມາດກາຍເປັນຄັງເອກະສານສຳລັບອ່ານໃນເມື່ອຫ້ອງຮຽນຂາດປຶ້ມອ່ານ.

ປຶ້ມອ່ານທີ່ເຮັດໂດຍເດັກສາມາດເປັນສື່ການສອນທີ່ມີປະສິດທິຜົນທີ່ສຸດ. ບັນດາຄຳອະທິບາຍ ຫລື ພາບທີ່ເດັກແຕ້ມໃສ່ໃນປຶ້ມອ່ານຂອງເຂົາອາດຈະຊ່ອຍເດັກຄົນອື່ນ ໄດ້ເຂົ້າໃຈແນວຄວາມຄິດທີ່ສຳຄັນ. ເດັກຈະເບິ່ງບັນຫາໃນແນວທີ່ແຕກຕ່າງກັນຫລາຍກວ່າຜູ້ໃຫຍ່; ພວກເຂົາໃຊ້ພາສາແບບງ່າຍໆ ເພື່ອໃຫ້ເຂົ້າໃຈ; ແລະ ພວກເຂົາອາດຈະສື່ສານ ຂໍ້ມູນຂ່າວສານທີ່ສຳຄັນໄດ້ຢ່າງສຳເລັດຜົນ, ອາດເຮັດໄດ້ດີກວ່າຄູອາຈານອີກ. ຈົ່ງເຝົ້າເບິ່ງປຶ້ມທີ່ເປັນປະໂຫຍດເຮັດໂດຍເດັກນັກຮຽນ!

ຍິ່ງໄປກວ່ານັ້ນ, ປຶ້ມທີ່ເດັກຜະລິດນັ້ນສາມາດນຳໃຊ້ເພື່ອສິດສອນທັກສະອື່ນໆອີກ, ໂດຍສະເພາະ ສຳລັບເດັກທີ່ມີບັນຫາໃນການມອງເຫັນ. ຕົວຢ່າງ: “ປຶ້ມບາງເຫລັ້ມ” ສາມາດຜະລິດຂຶ້ນໄດ້ດ້ວຍການຕິດກາວວັດສະດຸຕ່າງໆ ໃສ່ບົນໜ້າເຈ້ຍ. ເດັກຈະຮຽນຮູ້ສິ່ງເຫລົ່ານີ້ວ່າແມ່ນຫຍັງ ໂດຍໃຊ້ຄວາມຮູ້ສຶກຂອງເຂົາ; ຕົວຢ່າງ: ຕິດຮູບສາມຫລ່ຽມຢູ່ບົນໜ້າເຈ້ຍ ເພື່ອໃຫ້ເດັກ ທີ່ມີບັນ

ຫາທາງສາຍຕາສາມາດຮຽນຮູ້ ຈາກການສຳຜັດວ່າຮູບຮ່າງສາມຫລ່ຽມເປັນຄືແນວໃດ. ແມ້ແຕ່ເດັກທີ່ມີສາຍຕາດີ ກໍອາດສະໜຸກສະໜານກັບການສ້າງ “ປຶ້ມອ່ານແບບສຳຜັດ” ແລະ ເຂົາກໍສາມາດທີ່ຈະເຝິກປະຕິບັດ ໃຊ້ມັນດ້ວຍການຫລັບຕາຕົນເອງ. “ໂປສະເຕີແບບສຳຜັດ” ທີ່ອີງໃສ່ການສຳຜັດແຕະຕ້ອງຫລາຍກວ່າການເບິ່ງກໍສາມາດປະດິດຂຶ້ນໄດ້ເຫມືອນກັນ ແລ້ວເອົາວາງໄວ້ຢູ່ພື້ນທີ່ວາງສະແດງ.

ໃນບາງປະເທດ, ຫ້ອງສະໝຸດຫ້ອງຮຽນ ຫລື ໂຮງຮຽນເປັນຊັບພະຍາກອນຊຸມຊົນທີ່ສຳຄັນ, ໂດຍສະເພາະ ເມື່ອເວລາເດັກພົ້ມເຫຍ” ຜົນງານຂອງໂຄງການເກັບຂໍ້ມູນຊຸມຊົນ (ເຊັ່ນແຜນທີ່ໂຮງຮຽນ- ຊຸມຊົນດັ່ງທີ່ສະເໜີ (ໃນຄູ່ມືເຫລັ້ມທີ 1). ຂໍ້ມູນຂ່າວສານ ກ່ຽວກັບອາກາດ, ຫີນ ແລະ ດິນ, ປະຕິທິນການກະເສດ, ທີ່ຕັ້ງຂອງເຮືອນທີ່ມີລັກສະນະສະເພາະບາງຫລັງ ແລະ ອື່ນໆ ສ່ວນຫລາຍຈະຖືກນຳໃຊ້ ໂດຍພະນັກງານຊຸມຊົນ ແລະ ອົງການຈັດຕັ້ງມູນນິທິເອກະຊົນ ເມື່ອວາງແຜນກິດຈະກຳພັດທະນາ ຊຸມຊົນ.

ກິດຈະກຳເພື່ອປະຕິບັດ: ການປະເມີນຊັບພະຍາກອນຕ່າງໆ

ໃຫ້ລອງເບິ່ງອ້ອມຮອບຫ້ອງຮຽນຂອງທ່ານເອງ ແລ້ວກຳນົດວ່າດຽວນີ້ທ່ານມີ ຊັບພະຍາກອນຫຍັງແດ່ ລວມທັງຊັບພະຍາກອນທີ່ທ່ານ ແລະ ນັກຮຽນອາດສາມາດສ້າງໄດ້ໃນໄລຍະເວລາພາກຮຽນນີ້ ຫລື ປີນີ້. ໃຫ້ຖາມນັກຮຽນວ່າພວກເຂົາມັກຫຍັງແດ່ໃນຫ້ອງຮຽນ ແລະ ເພີ່ມເຕີມໃສ່ຕາຕະລາງຕໍ່ໄປນີ້ :

ຊັບພະຍາກອນ ຕ່າງໆ ຂອງ ຫ້ອງຮຽນ	ພວກເຮົາຄວນຈະເລີ່ມໂຄງການນີ້ເມື່ອໃດ?	ຊັບພະຍາກອນທີ່ຕ້ອງການມີຫຍັງແດ່ ແລະ ຈະສາມາດຫາໄດ້ຈາກໃສ?	ພວກເຮົາຈະສາມາດໄດ້ຮັບການຊ່ວຍເຫລືອອັນໃດແດ່?	ເດັກຈະໃຊ້ ຫລື ຮຽນຮູ້ຈາກຊັບພະຍາກອນເຫລົ່ານີ້ໄດ້ຢ່າງໃດ?
ກະດານວາງສະແດງຜົນງານຂອງເດັກ				
ມຸມຮຽນຮູ້ ຫລື ກະຕ່າອຸປະກອນສຳລັບຮຽນເລກ ແລະ ວິທະຍາສາດ				
ພື້ນທີ່ຮຽນພາສາສຳລັບເລົ່າເລື່ອງ, ຫ້ອງສະໝຸດ ນ້ອຍໆ ແລະ ອື່ນໆ				
ມີກະດານດຳຫລາຍກວ່າໜຶ່ງແຜ່ນ				
ຄະນະກຳມະການຫ້ອງຮຽນໄດ້ສ້າງຕັ້ງຂຶ້ນເພື່ອຈັດຕັ້ງປະຕິບັດວຽກກ່ຽວກັບ				

ອຸປະກອນການຮຽນ				
ຫ້ອງສະໝຸດນ້ອຍຫ້ອງຮຽນ ມີປຶ້ມ ຫລື ອຸປະກອນ ຕ່າງໆທີ່ຜະລິດໂດຍນັກຮຽນ				

4.5 ການຈັດຕັ້ງສະພາບແວດລ້ອມທາງກາຍະພາບຂອງຫ້ອງຮຽນ

ຈັດຕັ້ງສະພາບແວດລ້ອມທາງກາຍະພາບຂອງຫ້ອງຮຽນ

ຖ້າໃຫ້ດີທີ່ສຸດ, ຫ້ອງຮຽນຕ້ອງຈັດໃຫ້ມີແສງສະຫວ່າງ, ສະອາດ, ມີການປະກອບວັດຖຸອຸປະກອນໃສ່ຫ້ອງຮຽນເປັນຢ່າງດີ ຊຶ່ງເຮັດໃຫ້ນັກຮຽນທຸກຄົນມີຄວາມສະດວກສະບາຍ ແລະ ສາມາດ ເຮັດໃຫ້ເຂົາເຈົ້າຢ່າງໄປມາ ແລະ ຮ່ຳຮຽນໄດ້ດີ, ອາດຈະຮຽນເປັນລາຍບຸກຄົນ ຫຼື ຮຽນຢູ່ໃນກຸ່ມ. ເພື່ອຊຸກຍູ້ໃຫ້ການຮ່ຳຮຽນມີຊີວິດຊີວາ ແລະ ການມີສ່ວນຮ່ວມຂອງນັກຮຽນຄວນຈັດຕັ່ງນັ່ງ ໃຫ້ນັກຮຽນສາມາດເຫັນກັນ ແລະ ກັນ ພ້ອມທັງ ສາມາດເຫັນຄູສອນໄດ້.

ແຕ່ໜ້າເສຍດາຍ, ມີຫ້ອງຮຽນຈຳນວນໜ້ອຍທີ່ສຸດ ທີ່ສາມາດຈັດຕັ້ງໃຫ້ດີທີ່ສຸດ ສຳລັບການຮ່ຳຮຽນພິເສດ ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ເນື້ອທີ່ມີຈຳກັດ. ມັກມີເລື້ອຍໆທີ່ຫ້ອງຮຽນມີຄວາມຮ້ອນອົບເອົ້າ, ແອອັດ, ບົນແຊ, ຫ້ອງຮຽນນ້ອຍບັນຈຸນັກຮຽນຫຼາຍ ເຮັດໃຫ້ສະຖານທີ່ຮ່ຳຮຽນບໍ່ດີ ສຳລັບ ທ່ານ ແລະ ນັກຮຽນຂອງທ່ານ. ທ່ານຈຳເປັນຕ້ອງມີທັກສະ ໃນການປະດິດສ້າງ ແລະ ວາງແຜນ ເພື່ອສ້າງຫ້ອງຮຽນ ໃຫ້ເປັນບ່ອນສະດວກສະບາຍໃນການຮ່ຳຮຽນ. ແຕ່ວ່າ ວຽກງານອັນຍາກລຳບາກຂອງ ທ່ານນັ້ນຈະມີຄຸນຄ່າ ເນື່ອງຈາກວ່າ ມັນຈະເຮັດໃຫ້ວຽກງານຂອງທ່ານ ງ່າຍກວ່າເກົ່າ ແລະ ໃຫ້ຜົນຕອບ ແທນຫຼາຍຂຶ້ນ. ສິ່ງທີ່ຈະກ່າວ ຕໍ່ໄປໃນຂ້າງລຸ່ມນີ້ ແມ່ນວຽກງານຈຳນວນໜຶ່ງທີ່ເຮັດຮ່ວມ ກັບສະພາບແວດລ້ອມທາງດ້ານວັດຖຸຂອງຫ້ອງຮຽນ ຊຶ່ງ ທ່ານອາດພິຈາລະນາເບິ່ງວ່າ ທ່ານຈະວາງແຜນຈະເຮັດແນວໃດ ເພື່ອເຮັດໃຫ້ມີຄວາມສະດວກ ແກ່ນັກຮຽນຂອງທ່ານທຸກຄົນ ແລະ ຫຼຸດຜ່ອນຄວາມຮູ້ສຶກແອອັດ ຄວາມຫຍຸ້ງຍາກສັບສົນ ແລະ ຄວາມອຶດເມື່ອຍ ຊຶ່ງສ້າງຄວາມລົບກວນ ໃຫ້ແກ່ການສິດສອນໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ.

ເຮັດໃຫ້ເນື້ອທີ່ຫ້ອງຮຽນກວ້າງອອກຫລາຍທີ່ສຸດ. ໃນຂະນະທີ່ພວກເຮົາຫຼາຍໆຄົນ ບໍ່ໄດ້ມີການຄວບຄຸມສະຖານທີ່ບ່ອນທີ່ເຮົາເຮັດການສິດສອນ, ພວກເຮົາອາດມີໂອກາດ ເພື່ອຈັດຕັ້ງຫ້ອງຮຽນຕາມທີ່ເຮົາເຫັນວ່າມັນເໝາະສົມ. ການຈັດຕັ້ງຫ້ອງຮຽນສາມາດປັບປ່ຽນໄດ້ ຫຼື ມີຄວາມທ້າທາຍ, ແຕ່ວ່າໃນແນວຄວາມຄິດແມ່ນດຶງເອົານັກຮຽນມາເຂົ້າຢູ່ໃນກຸ່ມ ແລະ ເຮັດໃຫ້ມີເນື້ອທີ່ ເພື່ອໃຫ້ນັກຮຽນມີຄວາມ ສະດວກສະບາຍ ແລະ ຕ້ອງການເຂົ້າມາຮ່ວມສົນທະນາ ຫຼື ມາຮ່ວມໃນກຸ່ມ.

ຢູ່ໃນຫ້ອງຮຽນທີ່ມີເນື້ອທີ່ກວ້າງຂວາງ, ມັນຈະສະດວກສະບາຍສາມາດເຮັດໃຫ້ສະຖານທີ່ຮຽນກວ້າງຂວາງຂຶ້ນໄດ້, ໃຫ້ພິຈາລະນາຍົກຍ້າຍເຄື່ອງເຟີນີເຈີທີ່ບໍ່ຈຳເປັນອອກ ເພື່ອຫຼຸດຜ່ອນ

ຄວາມຮູ້ສຶກແອອັດ ແລະ ເພື່ອຄວາມສະດວກໃນການເຄື່ອນໄຫວໄປມາ. ຖ້າທ່ານບໍ່ຕ້ອງການ ໂຕະຂອງຄູ ທີ່ມີຂະໜາດໃຫຍ່ ທ່ານກໍເອົາໂຕະຂະໜາດນ້ອຍ. ແທນທີ່ຈະໃຊ້ໂຕະ ຫຼື ເກົ້າອີ້ ສຳລັບ ນັກຮຽນທ່ານກໍນຳ ຊ້ຜ້ືນສາດ ຫຼື ຜ້າພົມປູ ໃຫ້ນັກຮຽນນັ່ງ ເພື່ອທຸກຄົນຈະເຫັນກັນແລະກັນ ແລະ ມີຄວາມຮູ້ສຶກວ່າ ເປັນພາກສ່ວນໜຶ່ງຂອງກຸ່ມ. ດັ່ງຕົວຢ່າງ, ຢູ່ໃນຫ້ອງຮຽນຈຳນວນໜຶ່ງ ໃນ ບາງປະເທດການຂາດເຂີນ ໂຕະ ແລະ ເກົ້າອີ້ ການນຳໃຊ້ສາດ ຫຼື ພົມ ແມ່ນມີປະໂຫຍດຫລາຍ. ເນື້ອທີ່ຫ້ອງຮຽນທີ່ກວ້າງຂວາງປູດ້ວຍຜ້າພົມ ຫຼື ສາດທີ່ສະອາດທີ່ຜະລິດໃນທ້ອງຖິ່ນກໍສາມາດ ປ່ຽນແປງສະຖານທີ່ໆ ໃຊ້ຮຽນວິຊາວິ ທະຍາສາດ ມາເປັນເປັນສະຖານທີ່ສະແດງລະຄອນໄດ້, ສາມາດຈັດຕັ້ງເປັນກຸ່ມ ແລະ ປະກອບກຸ່ມ ຄືນໃໝ່ ໄດ້ຢ່າງສະດວກໂດຍບໍ່ລົບກວນຫ້ອງຮຽນອື່ນ. ກະດານດຳອາດຈະຕິດຕັ້ງໄວ້ຫ້ອງຮຽນ ໃຫ້ຢູ່ໃນລະດັບນັກຮຽນ ເພື່ອນັກຮຽນຈະສາມາດນັ່ງຢູ່ໃນ ກຸ່ມ ແລະ ໃຊ້ກະດານດຳ ເພື່ອສ້າງແຜນສົນທະນາ ຄວາມຄິດເຫັນແກ້ເລກໂຈດ ແລະ ອື່ນໆ.

ໃຫ້ທ່ານເກັບມ້ຽນປຶ້ມອ່ານ ອຸປະກອນການສຶກສາ (ເຊັ່ນ ສໍຂາວ, ບັນທັດ, ເຈ້ຍ, ນ້ຳສີ ແລະ ມີດຕັດ)ອຸປະກອນການສິດສອນ (ເຊັ່ນ: ກະດານດຳນ້ອຍ, ຂາຄ້ຳກະດານ, ເຈ້ຍຂາວ ແຜ່ນໃຫຍ່ ແລະ ຕາຕະລາງແຜນວຽກ) ເພື່ອນັກຮຽນ ແລະ ຄູສາມາດເອົາມາໃຊ້ ແລະ ເກັບມ້ຽນ ໄວ້ຢ່າງສະດວກງ່າຍ ດ່າຍ.

ຢູ່ໃນຫ້ອງຮຽນທີ່ແອອັດ ກໍຢ່າໄດ້ຢຶດເອົາພື້ນທີ່ໆມີຄຸນຄ່າ, ຖ້າຫາກມີບາງລາຍການຕ້ອງ ໄດ້ໃຊ້ເນື້ອທີ່ຫຼາຍ ເຊັ່ນ: ຕາຕະລາງແຜນວຽກກໍໃຫ້ຍ້າຍມັນອອກຈາກຫ້ອງຮຽນ, ຖ້າເປັນໄປໄດ້ ກໍເອົາຕັ້ງ ໄວ້ຢູ່ນອກຫ້ອງຮຽນ ອາດຈະເອົາໄວ້ກ້ອງຮົ່ມຕົ້ນໄມ້ບ່ອນທີ່ນັກຮຽນສາມາດ ນຳໃຊ້ໄດ້ ງ່າຍ. ຖ້າເປັນໄປໄດ້ກໍໃຫ້ເອົາເຄື່ອງໃຊ້ສ່ວນຕົວຂອງທ່ານ, ອຸປະກອນການສອນ ແລະ ເຄື່ອງອື່ນໆ ທີ່ທ່ານບໍ່ນຳໃຊ້ໃນເວລາສິດສອນປະໄວ້ຢູ່ຫ້ອງພັກຜ່ອນຂອງຄູ ຫຼື ເອົາໄວ້ຢູ່ຂ້າງນອກຫ້ອງຮຽນ ບ່ອນທີ່ມີຄວາມປອດໄພ.

ອຳນວຍຄວາມສະດວກໃນການເຄື່ອນໄຫວໄປມາ. ໃຫ້ທ່ານສ້າງແຜນໄວ້ລ່ວງໜ້າສຳລັບ ນັກຮຽນວ່າຈະສາມາດເຂົ້າ-ອອກຫ້ອງຮຽນໄດ້ດີທີ່ສຸດແນວໃດ, ຕົວຢ່າງ, ນັກຮຽນຜູ້ທີ່ນັ່ງທາງຫຼັງ ຫ້ອງຮຽນສາມາດເຂົ້າຫ້ອງກ່ອນ, ຕິດຕາມມາດ້ວຍຜູ້ນັ່ງຢູ່ແຖວທາງກາງ ແລະ ສຸດທ້າຍ ແມ່ນ ພວກນັ່ງຢູ່ແຖວທາງໜ້າ. ອາດສາມາດເຮັດກົງກັນຂ້າມກັນ ເພື່ອເຮັດໃຫ້ຫ້ອງຮຽນມີຄວາມຕື່ນ ເຕັ້ນ. ໃຫ້ວາງແຜນ ລ່ວງໜ້າວ່າ ທ່ານຈະປ່ຽນແປງການຈັດຫ້ອງແນວໃດ ໂດຍປ່ຽນໄປຕາມວິຊາ ທີ່ຈະສອນ ເຊັ່ນ ປ່ຽນແປງການຈັດຫ້ອງໝົດທັ້ງຫ້ອງ ສຳລັບເຮັດການກວດກາເປັນກຸ່ມນ້ອຍໃນ ບົດຮຽນວິຊາສິນລະປະ ຫຼື ວິຊາວິທະຍາສາດ. ໃຫ້ວາງແຜນໄວ້ວ່າ ກິດຈະກຳທີ່ເຮັດເປັນປະຈຳນັ້ນ ຈະດຳເນີນການແນວໃດເຊັ່ນ ສົ່ງເຈ້ຍວຽກບ້ານໃຫ້ຄູ ແລະ ສົ່ງເຈ້ຍວຽກບ້ານຄືນ ໃຫ້ນັກຮຽນພາຍ ຫຼັງກວດໃຫ້ຄະແນນແລ້ວ. ພ້ອມກັນນີ້ ກໍວາງແຜນ ເພື່ອຕອບສະໜອງຄວາມຕ້ອງການຂອງ ນັກຮຽນແຕ່ລະຄົນເຊັ່ນ ເວລາເຂົາເຈົ້າຕ້ອງການແຫຼມສໍ ຫຼື ຢາກໄດ້ອຸປະກອນ ສຳລັບການ ຮ່ຳຮຽນ.

ນຳໃຊ້ເນື້ອທີ່ຂ້າງນອກຂອງຫ້ອງຮຽນ. ເດີ່ນໂຮງຮຽນສາມາດເປັນຊັບພະຍາກອນອັນອຸດົມ ຮັ່ງມີ ສຳລັບການຮ່ຳຮຽນ ແລະ ສາມາດນຳໃຊ້ເປັນບ່ອນຮຽນທີ່ມ່ວນຊື່ນກວ່າ ຫ້ອງຮຽນທີ່ແອອັດ ໄດ້. ເດີ່ນໂຮງຮຽນຍັງເປັນສະຖານທີ່ສຳຄັນສຳລັບນັກຮຽນ ເພື່ອພັດທະນາທັກສະດ້ານສັງຄົມ ແລະ ຂະບວນການໆຮຽນຮູ້, ເພື່ອຮຽນຮູ້ບົດຮຽນອັນສຳຄັນ ກ່ຽວກັບ ການຮ່ວມມືຊຶ່ງກັນແລະກັນ, ຄວາມເປັນເຈົ້າຕົນເອງ, ການເປັນສະມາຊິກຂອງກຸ່ມ, ການເຄົາລົບນັບຖື ແລະ ຄວາມຮັບຜິດ ຊອບ. ໃຫ້ເບິ່ງອ້ອມຮອບໂຮງຮຽນຂອງທ່ານ, ໃຫ້ທ່ານກຳນົດເອົາບ່ອນທີ່ດີ ສຳລັບການຮ່ຳຮຽນ ແລ້ວຮວບຮວມເອົາມາເຂົ້າຢູ່ໃນບົດສອນຂອງທ່ານ. ດັ່ງຕົວຢ່າງ ເນື້ອທີ່ຕ່າງໆຂອງເດີ່ນໂຮງຮຽນ ສາມາດນຳມາໃຊ້ເປັນສູນກາງຂອງກິດຈະກຳ ເພື່ອສະໜັບສະໜູນສິ່ງທີ່ໄດ້ຮຽນມາ ກ່ຽວກັບວິຊາ ຕ່າງໆຢູ່ໃນຫ້ອງ. ດັ່ງຕົວຢ່າງ, ໃນການຮຽນຮູ້ ກ່ຽວກັບຮູບເລຂາຄະນິດນັກຮຽນສາມາດສຶກສາ ເບິ່ງເດີ່ນໂຮງຮຽນ ແລະ ກຳນົດຮູບເລຂາຄະນິດໃຫ້ໄດ້ຫຼາຍເທົ່າທີ່ຈະຫຼາຍໄດ້. ນັກຮຽນສາມາດ ນັ່ງຢູ່ກ້ອງຕົ້ນໄມ້ ແລະ ຂຽນຊື່ຮູບເລຂາຄະນະ ໃສ່ແຜ່ນເຈ້ຍໃຫ້ໄດ້ຫຼາຍເທົ່າ ທີ່ເຂົາເຈົ້າສາມາດຈື່ ໄດ້. ໃຫ້ຕິດຕາມກຳກັບຄວາມຄືບໜ້າຂອງນັກຮຽນ. ກ່ອນຈະເລີກຮຽນ, ໃຫ້ເຕົ້າໂຮມນັກຮຽນທັງ ໝົດ, ຈະຢູ່ໃນຫ້ອງຮຽນ ຫຼື ຢູ່ນອກຫ້ອງຮຽນກໍໄດ້ ເພື່ອນຳ ສະເໜີສິ່ງທີ່ຕົນໄດ້ຄົ້ນພົບ.

ຈັດວາງສະແດງວຽກງານຂອງນັກຮຽນຢ່າງປະດິດສ້າງ. ມີຄວາມຕ້ອງການເນື້ອທີ່ ສຳລັບ ວາງສະແດງຜົນງານການຮຽນຂອງນັກຮຽນ. ແທນທີ່ຈະວາງສະແດງໃສ່ກະດານດຳ ຫຼື ໂຕະ ຊຶ່ງ ກິນເນື້ອທີ່ ຫລາຍ, ເຮົາສາມາດຫ້ອຍຜົນງານການຮຽນຂອງນັກຮຽນໃສ່ຕາມຝາຂອງຫ້ອງຮຽນ ຫຼື ວາງສະແດງໄວ້ຂ້າງນອກປະຕູຂອງຫ້ອງຮຽນ ເພື່ອທຸກຄົນຈະໄດ້ເຫັນ. ນຳໃຊ້ສາຍເຊືອກມັດຫ້ອຍ ຜົນງານຂອງນັກຮຽນ, ໃຊ້ເຫຼັກຂັດ, ໃຊ້ສາຍເທັບຕິດ ຫຼື ໃຊ້ເຂັມໝຸດປັກ. ເຮັດການປະດັບປະດາ ຫ້ອງຮຽນດ້ວຍຜົນງານວຽກງານຂອງນັກຮຽນ ຈະຊ່ວຍເພີ່ມຄວາມດຶງດູດໃຈໃຫ້ແກ່ຫ້ອງຮຽນ ແລະ ເຮັດໃຫ້ຫ້ອງຮຽນເປັນຕາຢາກມາຫລາຍຂຶ້ນ ເຖິງແມ່ນວ່າ ມັນຈະມີນັກຮຽນຢູ່ໃນຫ້ອງຫລາຍກໍ ຕາມ.

ເອົານັກຮຽນເຂົ້າມາມີສ່ວນຮ່ວມ.ນັກຮຽນສາມາດຊ່ວຍຄຸ້ມຄອງສະຖານທີ່ຫ້ອງຮຽນໄດ້ ດີທີ່ສຸດ ແລະ ກໍເປັນການຊ່ວຍເຂົາເຈົ້າ ໃນການພັດທະນາຄວາມຮັບຜິດຊອບ. ນັກຮຽນສາມາດ ແຂວນຜົນງານ ວຽກງານຂອງເຂົາເຈົ້າ, ເຮັດກະດານຂ່າວ ແລະ ເກັບມ້ຽນອຸປະກອນການສຶກສາ ພາຍຫລັງ ສຳເລັດ ບົດຮຽນແຕ່ລະບົດ. ພ້ອມນັ້ນ ນັກຮຽນຍັງສາມາດຊ່ວຍເຫຼືອແກ້ໄຂບັນຫາ ຂອງເນື້ອທີ່ຂອງຫ້ອງຮຽນ ເມື່ອມີບັນຫາເກີດຂຶ້ນ ເຊັ່ນ ນັກຮຽນຕຳຊູນກັນ ຫຼື ບ່ອນນັ່ງບໍ່ພຽງພໍກໍ ບອກ ໃຫ້ນັກຮຽນສະເໜີວິທີການ ແກ້ໄຂ.

ສິ່ງສຳຄັນທີ່ຄວນຈື່ຈຳ ແມ່ນສິ່ງທີ່ເຮັດໃຫ້ທ່ານມີຄວາມຮູ້ສຶກສະດວກສະບາຍ ກໍອາດຈະບໍ່ ແມ່ນອັນດຽວກັນກັບທີ່ເຮັດໃຫ້ນັກຮຽນຮູ້ສຶກສະດວກສະບາຍເໝືອນກັບທ່ານ. ໃນຕອນເລີ່ມຕົ້ນ ຂອງສົກຮຽນໃໝ່ ໃຫ້ທ່ານຈັດຕັ້ງຫ້ອງຮຽນ, ແລ້ວໃຫ້ຖາມນັກຮຽນ ຖ້າຫາກວ່າເຂົາເຈົ້າມີຄວາມ

ສະດວກສະບາຍກັບການຈັດຕັ້ງຫ້ອງຄືແນວນັ້ນ. ຖ້າຫາກຍັງເຮັດບໍ່ໄດ້ດີ ໃຫ້ແບ່ງນັກຮຽນອອກ ເປັນກຸ່ມ ແລະ ບອກໃຫ້ແຕ່ລະກຸ່ມສຳຫລວດເບິ່ງອ້ອມຮອບຫ້ອງຮຽນ ແລະ ສິ່ງຂອງຕ່າງໆທີ່ມີຢູ່ ໃນຫ້ອງຮຽນແລ້ວ ໃຫ້ນັກຮຽນແຕ້ມແຜນຜັງວ່າ ເຂົາເຈົ້າຢາກໃຫ້ຫ້ອງຮຽນຖືກຈັດຕັ້ງຄືແນວໃດ. ນຳໃຊ້ແນວຄິດການແຕ້ມແຜນຜັງຂອງນັກຮຽນນັ້ນ ເພື່ອອອກແບບຫ້ອງຮຽນ “ສ່ວນຕົວ” ຂອງນັກ ຮຽນ. ທົດລອງຈັດຫ້ອງຮຽນ ສຳລັບໜຶ່ງ ຫຼື ສອງອາທິດ ແລ້ວຖາມນັກຮຽນວ່າ ເຂົາເຈົ້າຮູ້ສຶກສະ ດວກສະບາຍກັບຫ້ອງຮຽນບໍ. ໃຫ້ປ່ຽນແປງການຈັດຫ້ອງຮຽນ ຖ້າຫາກວ່ານັກຮຽນມີແຜນຜັງແບບ ໃໝ່ ທີ່ເຫັນວ່າມີຄວາມສະດວກສະບາຍກວ່າເກົ່າ. ຍິ່ງໄປກວ່ານັ້ນກໍໃຫ້ ທ່ານປ່ຽນການຈັດຫ້ອງ ເມື່ອເວລາ ທ່ານ ຮູ້ສຶກວ່ານັກຮຽນມີຄວາມ ເບື່ອໜ່າຍຕໍ່ການນັ່ງຢູ່ໃນຫ້ອງຮຽນ.

4.6 ການຈັດສະພາບແວດລ້ອມທາງດ້ານຈິດຕະສາດ-ສັງຄົມຂອງຫ້ອງຮຽນ

ຫ້ອງຮຽນຖືກເອີ້ນເລື້ອຍໆວ່າ ”ຊຸມຊົນຂອງການຮຽນຮູ້” ມັນເປັນ ສະຖານທີ່ໆ ຢູ່ພາຍໃນ ໂຮງຮຽນຊຶ່ງທ່ານ ແລະ ນັກຮຽນສາມາດພົບກັນຢ່າງເປັນປົກກະຕິ ເປັນບ່ອນທີ່ທຸກຄົນຫວັງຈະ ຮູ້ຈັກກັບຜູ້ອື່ນໆ ແລະ ຄົນຜູ້ໜຶ່ງໆ ເຮັດວຽກຮ່ວມກັບຜູ້ອື່ນໆ-ຄູສອນ ແລະ ນັກຮຽນ ເພື່ອຮຽນ ຮູ້ສິ່ງຕ່າງໆກ່ຽວກັບໂລກ.

ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ,ມັນມີຄວາມສຳຄັນທີ່ສຸດທີ່ຈະສ້າງຫ້ອງຮຽນໃຫ້ມີ ຄວາມໝາຍດັ່ງເປັນຊຸມຊົນໜຶ່ງ, ອັນໜຶ່ງແມ່ນ ເພື່ອສະແດງໃຫ້ເຫັນຄວາມສົນໃຈຂອງທ່ານ ແລະ ຂະຫຍາຍໂອກາດໃຫ້ນັກຮຽນໄດ້ເຂົ້າມາຮ່ວມ ຊຶ່ງເປັນການຊຸກຍູ້ໃຫ້ນັກຮຽນໄດ້ຮຽນ ຮູ້ກ່ຽວກັບທ່ານ ແລະ ມີສ່ວນຮ່ວມໃນຂະບວນການ ຮ່ຳຮຽນ. ຈຸດໝາຍ ແມ່ນເພື່ອເຮັດໃຫ້ທ່ານ ແລະ ນັກຮຽນໄດ້ເຂົ້າໃຈຊຶ່ງກັນ ແລະ ກັນດີກວ່າເກົ່າ. ການສ້າງ ຫ້ອງຮຽນໃຫ້ມີຄວາມໝາຍ ເໝືອນດັ່ງເປັນຊຸມຊົນ ແລະ ສ້າງສະພາບແວດລ້ອມທາງດ້ານຈິດຕະ ສາດ - ສັງຄົມທີ່ດີສາມາດ ກະຕຸ້ນນັກຮຽນ ໃຫ້ເອົາໃຈໃສ່ຮ່ຳຮຽນ, ເອົາເຂົາເຈົ້າມາຮ່ວມ ແລະ ຊ່ວຍເຫຼືອເຂົາເຈົ້າ ເພື່ອ ຮ່ຳຮຽນໃຫ້ໄດ້ຕາມຄວາມສາມາດເຖິງແມ່ນວ່າຈະຢູ່ພາຍໃຕ້ສະຖານະການທີ່ແອອັດກໍຕາມ. ຍິ່ງ ໄປກວ່ານັ້ນ ນັກຮຽນຍັງໄດ້ລາຍງານເຖິງຄຸນຄ່າອັນຍິ່ງໃຫຍ່ ຂອງການຮ່ຳຮຽນຂອງເຂົາເຈົ້າ ແລະ ເຂົາເຈົ້າໄດ້ຮັບຄະແນນດີກວ່າເກົ່າ ເມື່ອເວລາຄູສອນມີຄວາມເຕັມໃຈ ຊ່ວຍເຫຼືອເຂົາເຈົ້າໃນການ ຮຽນ.

ຢູ່ຂ້າງລຸ່ມນີ້ ແມ່ນຂໍ້ສະເໜີຈຳນວນໜຶ່ງ ເພື່ອປະດິດສ້າງສະພາບແວດລ້ອມທາງດ້ານຈິດ ຕະສາດສັງຄົມທີ່ດີຢູ່ໃນຫ້ອງຮຽນຂອງທ່ານ ຫຼື ເພື່ອປັບປຸງສະພາບແວດລ້ອມທີ່ທ່ານ ແລະ ນັກຮຽນທີ່ກຳ ລັງຮ່ຳຮຽນຢູ່.

ເຮັດໃຫ້ຫ້ອງຮຽນທີ່ມີຂະໜາດກວ້າງເປັນຄ້າຍຄືຫ້ອງຮຽນນ້ອຍ.ມີຄູສອນຫຼາຍຄົນພະຍາຍາ ມເຮັດໃຫ້ຫ້ອງຮຽນທີ່ກວ້າງໃຫ້ກາຍເປັນຄ້າຍຄືຫ້ອງຮຽນທີ່ນ້ອຍ, ຄືດັ່ງນີ້. ພະຍາຍາມຍ່າງໄປຫາ ນັກຮຽນຜູ້ທີ່ມັກຕັ້ງຄຳຖາມເລື້ອຍໆ, ຊຶ່ງເປັນການຫຼຸດໄລຍະຫ່າງທາງດ້ານ ວັດຖຸ ແລະ ສັງຄົມ ແລະ ຊ່ວຍເຫຼືອຜູ້ຊ່ວຍຫ້ອງຮຽນແຈກຢາຍອຸປະກອນ. ໃຫ້ຈື່ຄຳໜຶ່ງໄວ້ວ່ານັກຮຽນອາດບໍ່ມີຄວາມ

ຮູ້ສຶກວ່າເຂົາເຈົ້າຢູ່ໃນຫ້ອງກວ້າງ ຄືດັ່ງ ທ່ານເຮັດ. ອີກເທື່ອໜຶ່ງ ນັກຮຽນໄດ້ພັນລະນາ ຄູສອນ ຜູ້ທີ່ເຮັດໃຫ້ຫ້ອງຮຽນກວ້າງຮູ້ສຶກວ່າຫ້ອງຮຽນນ້ອຍເຂົ້າ ຍ້ອນວ່າມັນເປັນວິທີການສ່ວນຕົວຂອງ ຄູເອງ. ຄູສອນເຄື່ອນໄຫວໄປມາ ຢູ່ໃນຫ້ອງຮຽນຫຼາຍຄັ້ງຍ່າງຂຶ້ນຍ່າງລົງຢູ່ໃນຫ້ອງຮຽນ. ທ່ານຮູ້ວ່າ ຄູມີຄວາມຕ້ອງການຢາກໃຫ້ນັກຮຽນຂອງເພິ່ນເຂົ້າມາຫ້ອງຮຽນ ແລະ ເພິ່ນມີຄວາມເປັນຫ່ວງ ນັກຮຽນຂອງເພິ່ນເອງ. ຄູສອນຜູ້ນີ້ມາໂຮງຮຽນ ແຕ່ເຊົ້າເພື່ອໂອ້ລົມນຳນັກຮຽນ. ເພິ່ນຊ່ວຍເຫຼືອ ນັກຮຽນຕິດຕໍ່ກັບນັກຮຽນຜູ້ອື່ນໆ ຜູ້ທີ່ສາມາດຊ່ວຍເຫຼືອເຂົາເຈົ້າໃນການຮຽນ. ຄູສອນຍອມຮັບວ່າ ນັກຮຽນຂອງເພິ່ນເປັນຄົນທີ່ໜ້າສົນໃຈ ແລະ ດຳລົງຊີວິດ ຢູ່ນອກຫ້ອງຮຽນ ຂອງເພິ່ນ.

ຫຼຸດຜ່ອນຈຳນວນນັກຮຽນໃນຫ້ອງລົງຊົ່ວຄາວ: ໃນໄລຍະເວລາເຂົ້າຮຽນສຶກຮຽນໃໝ່ສອງ ຫຼື ສາມມື້ທຳອິດ ຄູສອນຈຳນວນໜຶ່ງມີຄວາມຕັ້ງໃຈຫຼຸດຜ່ອນຈຳນວນນັກຮຽນໃນຫ້ອງລົງ. ພວກເພິ່ນ ໄດ້ແບ່ງຫ້ອງຮຽນເປັນເຄິ່ງໜຶ່ງ (ຫຼື ເປັນໜຶ່ງສ່ວນສາມ) ໂດຍໃຫ້ນັກຮຽນຈຳນວນເຄິ່ງໜຶ່ງມາຮຽນ ຕອນເຊົ້າ ໃນຂະນະອີກເຄິ່ງໜຶ່ງມາຮຽນຕອນບ່າຍ. ໃນໄລຍະເວລານີ້, ຄູສອນແຕ່ລະຄົນສາມາດ ດຳເນີນກິດຈະກຳ"ເຮັດໃຫ້ຮູ້ຈັກກັບທ່ານ" ໂດຍຊອກຮູ້ຊື່ນັກຮຽນ, ເກັບກຳຂໍ້ມູນກ່ຽວກັບສະພາບ ຄວາມເປັນມາຂອງຄອບຄົວນັກຮຽນ ແລະ ຄວາມສົນໃຈຂອງນັກຮຽນແຕ່ລະຄົນ ກໍຄື ການເຮັດ ວັດຜົນຂັ້ນຕົ້ນກ່ຽວກັບຄວາມຮູ້ ແລະ ທັກສະຂອງນັກຮຽນ ໂດຍຜ່ານການເຮັດທົດສອບແບບ ປາລະໄນ (ສົນທະນາຢູ່ຂ້າງລຸ່ມ) ຫຼື ເຮັດ ແບບສອບຖາມທີ່ງ່າຍດາຍ.

ທຳຄວາມຮູ້ຈັກກັບນັກຮຽນຂອງທ່ານ-ໃຫ້ຈຳຊື່ພ້ອມດ້ວຍໜ້າ. ເຖິງແມ່ນມັນຈະເປັນຕາ ໜ້າຕົກໃຈແດ່ກໍຕາມທີ່ໄດ້ສອນ ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ. ການຮຽນຮູ້ຊື່ນັກຮຽນ ແມ່ນບາດ ກ້າວທຳອິດໃນການເຮັດໃຫ້ຫ້ອງຮຽນມີຄວາມສະດວກສະບາຍ ຊຶ່ງຈະເປັນການຊຸກຍູ້ ໃຫ້ນັກຮຽນມີສ່ວນຮ່ວມ. ມັນຍັງສະແດງ ໃຫ້ນັກຮຽນເຫັນອີກວ່າ ທ່ານມີ ຄວາມສົນໃຈຕໍ່ນັກຮຽນ ເປັນລາຍບຸກຄົນນຳອີກ, ຍັງມີຫຼາຍວິທີທີ່ງ່າຍດາຍເພື່ອຮຽນຮູ້ຊື່ນັກຮຽນ ແລະ ເຮັດໃຫ້ຮູ້ຈັກກັບ ເຂົາເຈົ້າ.

ເຮັດແຜນຜັງບ່ອນນັ່ງ. ສຳລັບອາທິດທຳອິດບອກໃຫ້ນັກຮຽນນັ່ງຢູ່ຕັ່ງບ່ອນເກົ່າ ແລະ ກະກຽມແຜນຜັງບ່ອນນັ່ງໄວ້. ໃຫ້ພະຍາຍາມຈື່ຊື່ນັກຮຽນຈຳນວນ 4-5 ຄົນໃນແຕ່ລະຕອນ.

ຖ່າຍຮູບ ຫຼື ມີຮູບແຕ້ມຂອງນັກຮຽນ. ໃນໄລຍະມື້ທຳອິດ ຫຼື ມື້ທີສອງຂອງການສິດສອນ ຖ້າຫາກເປັນໄປໄດ້ ໃຫ້ເຕົ້າໂຮມນັກຮຽນ ເພື່ອຖ່າຍຮູບ. ການຕັ້ງຮູບໄວ້ເປັນການສ້າງສະພາບ ແວດລ້ອມແບບທຳມະດາ ແລະ ຜ່ອນຄາຍອາລົມ. ເອົາຮູບຢາຍໃຫ້ນັກຮຽນແຕ່ລະຄົນ ພ້ອມທັງ ບອກເຂົາເຈົ້າຂຽນຊື່ໃສ່ຂ້າງຮູບ ຫຼື ຂຽນເລກທີແຕ່ລະຄົນໃສ່ ແລ້ວຂຽນຊື່ໃສ່ຂ້າງລຸ່ມຂອງຮູບທາງ ຂ້າງຂອງເລກທີ. ຖ້າບໍ່ມີຄວາມເປັນໄປໄດ້ໃນການຖ່າຍຮູບ ກໍໃຫ້ເຂົາເຈົ້າແຕ້ມຮູບຂອງຕົນເອງ ຫຼື ໃຫ້ເຂົາເຈົ້າຈັບຄູ່ກັນແລ້ວ ໃຫ້ແຕ້ມຮູບຄູ່ຂອງຕົນເອງ. ຊຸກຍູ້ໃຫ້ເຂົາເຈົ້າແຕ້ມອັນໃດອັນໜຶ່ງ ທີ່ ເປັນເອກະລັກສຳລັບຄູ່ຂອງຕົນ ເຊັ່ນ ແຂ້ວວ່ອງ ຫຼື ຜົມຢົກ. ຕິດຮູບໃສ່ທາງໜ້າຂຽນຊື່ຕິ່ມໃສ່

ຮູບແລ້ວວາງຮູບຢູ່ໃກ້ບ່ອນເຂົາເຈົ້ານັ່ງ. ໃນໄລຍະໜຶ່ງ ຫຼື ສອງອາທິດທຳອິດຂອງການເຂົ້າຮຽນ ຖ້າບໍ່ມີຄວາມເປັນໄປໄດ້ໃນການເອົາຮູບວາງຢູ່ ໃກ້ນັກຮຽນກໍໃຫ້ນັກຮຽນນັ່ງເປັນແຖວ, ຖ້າເຂົາເຈົ້າເຮັດບໍ່ໄດ້ດີ (ທ່ານສາມາດຈັດແບ່ງນັກຮຽນເປັນກຸ່ມ ຮຽນຕາມພາຍຫຼັງ), ໃຫ້ເອົາຮູບນັກຮຽນຕິດລຽນກັນຕາມທາງຕັ້ງໃສ່ຝາຫ້ອງຂ້າງແຕ່ລະແຖວ ໂດຍໃຫ້ຮູບທີ່ຢູ່ເທິງເປັນຮູບຂອງນັກຮຽນ ທີ່ນັ່ງຢູ່ໃກ້ຝາກວ່າໝູ່ ແລະ ຮູບຢູ່ຂ້າງລຸ່ມ ເປັນຮູບຂອງນັກຮຽນທີ່ນັ່ງຢູ່ໄກຝາທີ່ສຸດ.

ນຳໃຊ້ນາມບັດ ແລະ ປ້າຍຊື່. ຖ້າບໍ່ສາມາດຖ່າຍຮູບ ແລະ ແຕ້ມຮູບໄດ້, ໃນເວລາມີການຮ່ຳຮຽນ ໃຫ້ນັກຮຽນເຮັດປ້າຍຊື່ຕັ້ງໃສ່ຕໍ່ໜ້າເຂົາເຈົ້າ. ໃນເວລາເລີ່ມຕົ້ນເຂົ້າຮຽນ 2-3 ອາທິດ ທຳອິດ, ຖ້າທ່ານບໍ່ສາມາດນຳໃຊ້ໂຕະນັກຮຽນອາດເຮັດປ້າຍຊື່ຕິດໃສ່ເສື້ອ. ກ່ອນເຂົ້າຫ້ອງສອນ ຫຼື ໃນເວລາສິດສອນ ກໍ່ໃຫ້ເລົ່າຊື່ນັກຮຽນທີ່ນັ່ງໄປຕາມແຖວທາງຢ່າງລະຫວ່າງ ໂຕະ ແລະ ເອີ້ນຊື່ແຕ່ລະຄົນຢູ່ໃນຫ້ອງຮຽນ. ໃຫ້ເຮັດຄືແນວນີ້ ເພີ່ມຂຶ້ນຮອດແຖວທາງກາງຂອງຫ້ອງຮຽນ, ຮຽກເອີ້ນນັກຮຽນແຕ່ລະຄົນ ໂດຍໃຫ້ເອີ້ນຊື່ຂອງເຂົາ.

ນຳໃຊ້ວິທີການແນະນຳຕົນເອງ. ໃຫ້ນັກຮຽນຈຳນວນໜ້ອຍໜຶ່ງແນະນຳຕົນເອງ, ແລ້ວຢຸດເຊົາການແນະນຳ ແລະ ບອກໃຫ້ນັກຮຽນຜູ້ອື່ນໆ ຂຽນຊື່ນັກຮຽນທຸກຄົນທີ່ໄດ້ແນະນຳຕົນເອງໄປແລ້ວນັ້ນ. ໃຫ້ເອີ້ນຊື່ນັກຮຽນຈຳນວນນັ້ນຄືນໃໝ່ອີກເທື່ອໜຶ່ງ, ໃຫ້ເຮັດດັ່ງນີ້ໄປຈົນທຸກຄົນໄດ້ແນະນຳຕົນເອງ. ສຳລັບຫ້ອງຮຽນທີ່ມີນັກຮຽນຫຼາຍຄົນ ໃຫ້ເຮັດກິດຈະກຳນີ້ຕະຫລອດອາທິດ ແລະ ຄັດເລືອກນັກຮຽນ ເປັນກຸ່ມນ້ອຍໆ ເພື່ອເຮັດການແນະນຳໃນແຕ່ລະມື້.

ເຮັດການຕິດຕາມຢ່າງຕັ້ງໜ້າ. ໃນໄລຍະເລີ່ມຕົ້ນສົກຮຽນໃໝ່ ໃຫ້ໃຊ້ວິທີການເອີ້ນຊື່ນັກຮຽນຫຼາຍໆເທື່ອ ເພື່ອຈະໄດ້ຈື່ໜ້າ ແລະ ຊື່ໃຫ້ໄວເທົ່າທີ່ຈະເຮັດໄດ້. ເຖິງແມ່ນວ່າຈະມີຊື່ຈຳນວນໜຶ່ງ ທີ່ທ່ານບໍ່ສາມາດຈື່ໄດ້ກໍຕາມ ນັກຮຽນຈະມີຄວາມພໍໃຈຕໍ່ຄວາມພະຍາຍາມຂອງທ່ານເປັນຢ່າງຍິ່ງ.

ໃຫ້ໃຊ້ຊື່ນັກຮຽນຂອງທ່ານຢ່າງຕັ້ງໜ້າ. ກ່ອນນັກຮຽນຈະເວົ້າແຕ່ລະຄັ້ງ ໃຫ້ນັກຮຽນບອກຊື່ຕົນເອງ. ການເຮັດແນວນີ້ ສາມາດດຳເນີນຕໍ່ໄປຈົນກວ່າທຸກຄົນຮູ້ສຶກວ່າ ເຂົາເຈົ້າຮູ້ຈັກຊື່ທຸກຄົນຢູ່ໃນຫ້ອງຮຽນ. ການນຳໃຊ້ຊື່ນັກຮຽນ ແມ່ນເປັນໄປໄດ້ສະເໝີ.

ເຮັດການຈື່ຈຳແບບເລົ່າ. ພະຍາຍາມຈື່ຈຳແຖວ ຫຼື ກຸ່ມນັກຮຽນເປັນມື້ໆໄປ. ກ່ອນຈະເລີ່ມສອນ ໃຫ້ໃຊ້ເວລາໜ້ອຍໜຶ່ງ ເພື່ອທົບທວນສິ່ງທີ່ທ່ານໄດ້ຈື່ຈຳມາແລ້ວນັ້ນ ແລະ ແລ້ວກໍເຮັດການຈື່ຈຳແຖວອື່ນ ຫຼື ກຸ່ມອື່ນຕໍ່ໄປຈົນຄົບໝົດລາຍຊື່ນັກຮຽນ.

ນຳໃຊ້ "ຈຸດເດັ່ນສະເພາະ". ໃຫ້ຈື່ຊື່ນັກຮຽນດ້ວຍວິທີຈື່ຄຸນລັກສະນະດ້ານບຸກຄະລິກ ຫຼື ຮູບ ຮ່າງຂອງນັກຮຽນ. ດັ່ງຕົວຢ່າງ: ນາງ ສີດາ ມີແຂ້ວວ່ອງທາງໜ້າ ທ້າວຄຳພາ ມີຜົມຢິກສີຂາວ ແລະ ທ້າວຄຳແພງຍິ້ມຕະຫຼອດເວລາ. ເມື່ອເວລາທ່ານບອກໃຫ້ນັກຮຽນແນະນຳຕົວເອງ ຂໍໃຫ້ເຂົາ

ເຈົ້າບອກ“ລັກສະນະທາງດ້ານຮ່າງກາຍທີ່ເປັນຈຸດເດັ່ນ” ຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າມີຄວາມ ແຕກຕ່າງຈາກນັກຮຽນ ຜູ້ອື່ນໆຂອງກຸ່ມທີ່ຍັງເຫຼືອ. ລັກສະນະດັ່ງກ່າວນີ້ ຄວນໃຫ້ຄົງທີ່ຕະຫລອດ ໄປ ແລະ ສາມາດເຫັນໄດ້ຈາກ ທາງໜ້າຂອງຫ້ອງຮຽນ.

ນຳໃຊ້ເວລາໃນຫ້ອງຮຽນຢ່າງປະດິດສ້າງ. ເມື່ອເວລາມອບວຽກການຂຽນຢູ່ໃນຫ້ອງ ຮຽນ ກໍ່ບອກ ໃຫ້ນັກຮຽນຂຽນຊື່ດ້ວຍຕົວໜັງສືໃຫຍ່ໆ ໃສ່ເຈ້ຍແລ້ວວາງໄວ້ຕໍ່ໜ້າຂອງເຂົາເຈົ້າ ຫຼື ວາງປ້າຍຊື່ໄວ້ເທິງໂຕະຕໍ່ໜ້າຂອງນັກຮຽນ. ທ່ານສາມາດເລາະໄປຕາມຫ້ອງຮຽນເພື່ອຈື່ຊື່ນັກຮຽນ.

ເອົານັກຮຽນມີສ່ວນຮ່ວມນຳ. ແຕ່ລະມື້ ໃຫ້ທ່ານບອກນັກຮຽນສອງ ຫຼື ສາມຄົນ ມາ ເປັນ”ຜູ້ຊ່ວຍວຽກຫ້ອງຮຽນ” ເພື່ອຊ່ວຍເຫຼືອທ່ານເຮັດການສາທິດ, ແຈກຢາຍອຸປະກອນ ຫຼື ເຮັດ ກິດຈະກຳອື່ນໆ, ນັກຮຽນສາມາດຊ່ວຍທ່ານໃນການຈື່ຊື່ນັກຮຽນໄດ້. ໃນເວລາເຮັດກິດຈະກຳ ໃຫ້ ເວົ້າລົມນຳ ນັກຮຽນ ເພື່ອທ່ານຈະໄດ້ຮຽນຮູ້ ກ່ຽວກັບປະຫວັດຄວາມເປັນມາ ແລະ ຄວາມສົນໃຈ ຂອງເຂົາເຈົ້າ.

ຈັດແບ່ງນັກຮຽນໃນຫ້ອງເປັນກຸ່ມນ້ອຍໆ. ຈັດແບ່ງນັກຮຽນ ໃນຫ້ອງທັງໝົດເປັນກຸ່ມ ນ້ອຍ“ເປັນກຸ່ມເຮັດວຽກ” ຈະຊ່ວຍທ່ານໃນການຈື່ຊື່ສະດວກຂຶ້ນ. ໃນເວລາສອນໃນຫ້ອງຮຽນ ກໍສາ ມາດເອົາໂຄງການນ້ອຍໆ ໃຫ້ແຕ່ລະກຸ່ມເຮັດ. ຕ້ອງຄຳນຶງໄວ້ວ່າ ໃນກຸ່ມນ້ອຍໜຶ່ງອາດມີນັກຮຽນ 8-9 ຄົນ ຊຶ່ງຈະ ງ່າຍກວ່າ ທີ່ຈະເບິ່ງກຸ່ມທີ່ມີນັກຮຽນຫຼາຍກວ່າ 60 ຄົນຂຶ້ນໄປ. ໃຫ້ສັງເກດເບິ່ງວ່າ ແມ່ນໃຜນັ່ງນຳຜູ້ໃດ. ຈາກນັ້ນກໍພະຍາຍາມຈື່ຊື່ຂອງເດັກແຕ່ລະຄົນໃນກຸ່ມໃດໜຶ່ງ ສະເພາະ.

ດຳເນີນກິດຈະກຳແບບສະຫລັບກັນກ່ຽວກັບ “ທຳຄວາມຮູ້ຈັກກັບເຈົ້າ” ໃນໄລຍະສອງ ຫຼື ສາມ ມື້ທຳອິດຂອງປີຮຽນ ເພື່ອເຮັດໃຫ້ນັກຮຽນຮູ້ຈັກກັນ ແລະ ກັນ, ແລະ ທ່ານເອງກໍສາມາດ ຮຽນຮູ້ກ່ຽວກັບນັກຮຽນ. ສຳລັບຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ໃຫ້ບອກນັກຮຽນຈັກ ຫົກ ຫຼື ແປດຄົນ ເຮັດການ ແນະນຳເຂົາເຈົ້າເອງໃນຕອນເລີ່ມຕົ້ນ ຫຼື ຕອນທ້າຍຂອງມື້ຮຽນ. ຍັງມີເກມອີກ ອັນໜຶ່ງ ເອີ້ນວ່າເກມຮຽກ ຊື່. ເກມຊະນິດນີ້ດຳເນີນໄດ້ດີກັບຫ້ອງຮຽນທີ່ມີນັກຮຽນຈຳນວນໜ້ອຍ, ແຕ່ມັນກໍສາມາດນຳໃຊ້ໄດ້ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍໄດ້ເຊັ່ນກັນ ໂດຍການຈັດກຸ່ມ ນັກຮຽນ ຫຼື ໃນເວລາສອນຢູ່ໃນຫ້ອງຮຽນ ກໍຈັດແບ່ງນັກຮຽນອອກເປັນກຸ່ມນ້ອຍໆຊົ່ວຄາວ. ເລີ່ມຕົ້ນເກມ ໂດຍໃຫ້ນັກຮຽນຜູ້ທຳອິດບອກຊື່ຂອງຕົນເອງ, ແລ້ວນັກຮຽນຜູ້ທີ່ສອງເວົ້າຊື່ນັກຮຽນ ຜູ້ທຳອິດ ແລະ ຊື່ຂອງຕົນເອງ ແລະ ນັກຮຽນຜູ້ທີ່ສາມບອກຊື່ຕົນເອງ ແລ້ວເວົ້າຊື່ນັກຮຽນສອງຄົນ ທຳອິດ. ສືບຕໍ່ເຮັດແນວນີ້ໄປຈົນກັບຄືນມາຮອດນັກຮຽນຜູ້ທຳອິດ ໂດຍໃຫ້ຊື່ຄູສອນຢູ່ໃກ້ຕອນສຸດ ທ້າຍ.

ທ່ານສາມາດສ້າງແບບຟອມ “**ທຳຄວາມຮູ້ຈັກກັບເຈົ້າ**” ໂດຍໃຫ້ຂຽນໃສ່ບ່ອນເປົ່າຫວ່າງເຊັ່ນ:

- ຫຼັງຈາກເລີກໂຮງຮຽນແລ້ວ
  ຂ້ອຍຢາກ_____
- ອາຫານທີ່ຂ້ອຍມັກທີ່
  ສຸດແມ່ນ_____
- ກິດຈະກຳທີ່ຂ້ອຍມັກເຮັດທີ່
  ສຸດແມ່ນ_____
- ວິຊາຮຽນຢູ່ໃນໂຮງຮຽນທີ່ຂ້ອຍມັກແມ່ນ_____
  _____
- ຂ້ອຍຢາກເປັນຄື_____
  _____
- ຂ້ອຍຕ້ອງການຢາກເປັນ_____ເມື່ອເວລາຂ້ອຍຮຽນຈົບໂຮງຮຽນແ
  ລ້ວ”

ທ່ານສາມາດນຳໃຊ້ແບບຟອມນີ້ ເພື່ອໃຫ້ນັກຮຽນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ໃຫ້ຮູ້ຈັກກັນ ແລະ ກັນດີກວ່າເກົ່າ, ເຖິງແມ່ນວ່າເຂົາເຈົ້າເຄີຍໄດ້ຢູ່ຫ້ອງດຽວກັນມາກ່ອນແລ້ວກໍ່ຕາມ. ຢູ່ໃນເຈ້ຍທີ່ມີຂໍ້ມູນນີ້, ໃຫ້ເພີ່ມຖັນໃສ່ທາງດ້ານຂວາຂອງເຈ້ຍ ແຕ່ໃຫ້ປະບ່ອນເປົ່າຫວ່າງໄວ້. ພາຍຫລັງ ນັກຮຽນຂຽນຕື່ມໃສ່ບ່ອນເປົ່າຫວ່າງແລ້ວ ໃຫ້ບອກເຂົາເຈົ້າຊອກຫານັກຮຽນຜູ້ອື່ນທີ່ມີ ຄຳຕອບ ແບບດຽວກັນນີ້ ແລະ ໃຫ້ຂຽນຊື່ນັກຮຽນແຕ່ລະຄົນ ໃສ່ຖັນທາງຂວາມື.

ສ້າງປະຫວັດນັກຮຽນ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍຄົນ, ຄູສອນຈຳເປັນຕ້ອງມີວິທີການທີ່ມີປະສິດທິຜົນ ເພື່ອຊອກຮູ້ການດຳລົງຊີວິດຂອງນັກຮຽນຢູ່ທາງນອກຫ້ອງຮຽນ. ຖ້າຫາກເຂົາເຈົ້າເກີດມີບັນຫາ ໃນການຮຽນຄູສາມາດຊ່ວຍເຫຼືອນັກຮຽນໄດ້ຫຼາຍເທົ່າທີ່ເປັນໄປໄດ້. ມີຄູສອນຈຳນວນຫຼາຍໄດ້ສ້າງແບບສອບຖາມແບບງ່າຍໆ ເພື່ອຖາມນັກຮຽນກ່ຽວກັບຄອບຄົວຂອງເຂົາ. ແບບສອບຖາມປະກອບມີຄຳຖາມ ກ່ຽວກັບເລື່ອງທີ່ມີຜົນຕໍ່ການຮຽນ ແລະ ການມາໃນໂຮງຮຽນ ຂອງນັກຮຽນ ເຊັ່ນວ່າ ຜູ້ປົກຄອງຂອງນັກຮຽນຍັງມີຊີວິດຢູ່ ຫຼື ວ່າແຕ່ງງານແລ້ວ ເຂົາເຈົ້າຢູ່ເຮືອນຫລັງດຽວກັນບໍ ຫຼືວ່າ ໄປເຮັດວຽກຢູ່ບ່ອນອື່ນຊົ່ວຄາວ, ໃຜເປັນຜູ້ເບິ່ງແຍງດູແລນັກຮຽນ, ມີຈັກຄົນຢູ່ໃນເຮືອນຫລັງນັ້ນ, ຜູ້ປົກຄອງນັ້ນມີສາຍພົວພັນກັບນັກຮຽນແນວໃດ, ອາຊີບ ແລະ ລະດັບການສຶກສາຂອງຜູ້ປົກຄອງເປັນຄືແນວໃດ, ຊັບພະຍາກອນຕ່າງໆຂອງຄອບຄົວມີຫຍັງແດ່ ເຊັ່ນລາຍຮັບ, ທີ່ດິນ ຫຼື ກອງທຶນພັດທະນາຊຸມຊົນ. ເຮົາເກັບກຳຂໍ້ມູນເຫຼົ່ານີ້ໄດ້ດ້ວຍຫຼາຍວິທີ ເຊັ່ນ: ສົ່ງແບບສອບຖາມໄປຍັງເຮືອນນັກຮຽນ ເພື່ອໃຫ້ຜູ້ປົກຄອງ ຫຼື ຜູ້ດູແລນັກຮຽນຂຽນຕື່ມໃສ່ ຫຼື ເຮັດການສຳພາດນັກຮຽນເອງ. ຖ້າຫາກວ່ານັກຮຽນເລີ່ມຕົ້ນເຮັດບໍ່ໄດ້ດີ ຄູສອນສາມາດໃຫ້ຄຳປຶກສາແນະນຳຕາມແບບສອບຖາມ ເພື່ອກຳນົດສາເຫດ ແລະ ການກະທຳ ທີ່ອາດເກີດຂຶ້ນໄດ້.

ມີລັກສະນະເປັນສ່ວນຕົວ. ການມີລັກສະນະສ່ວນຕົວໃນຫ້ອງຮຽນທີ່ມີ ນັກຮຽນຈຳນວນຫຼາຍ ໝາຍເຖິງການສະເໜີຕົວທ່ານເອງຕໍ່ກັບນັກຮຽນ "ໃນຖານະເປັນຄົນຜູ້ໜຶ່ງ", ບໍ່ແມ່ນເປັນພຽງແຕ່ຄູສອນທຳມະດາ. ທ່ານສະແດງໃຫ້ເຂົາເຈົ້າຮູ້ວ່າ ທ່ານຕ້ອງການຢາກຮູ້ກ່ຽວກັບ ເຂົາເຈົ້າຫຼາຍປານໃດ ກໍຄື ທ່ານຕ້ອງການຢາກໃຫ້ເຂົາເຈົ້າຮູ້ກ່ຽວກັບຕົວທ່ານຫຼາຍຄືກັນ. ບໍ່ຈຳເປັນທີ່ທ່ານຈະແລກປ່ຽນຂໍ້ມູນ ຂ່າວສານ ທີ່ມີລັກນະນະສ່ວນຕົວທີ່ສຸດຂອງທ່ານໃຫ້ນັກຮຽນຮັບຊາບໝົດລວມທັງ ຂໍ້ມູນຂ່າວສານກ່ຽວກັບທ່ານໃນການບັນລະຍາຍບົດຮຽນ ແລະ ໃນເວລາເຮັດກິດຈະກຳການຮຽນຮູ້ສາມາດທີ່ຈະຊ່ວຍ ເຮັດໃຫ້ສະພາບແວດລ້ອມຂອງການຮ່ຳຮຽນມີລັກສະນະສ່ວນຕົວໄດ້. ທ່ານສາມາດເລີ່ມຕົ້ນຂະບວນການໃນມື້ທຳອິດ ໃນເວລາທ່ານກຳລັງເວົ້າກ່ຽວກັບສິ່ງທີ່ນັກຮຽນຈະໄດ້ຮຽນຮູ້, ແລະ ປະສົບການຂອງ ທ່ານກ່ຽວກັບສິ່ງທີ່ຈະເຮັດໃຫ້ນັກຮຽນ ຮຽນໄດ້ດີທີ່ສຸດ. ໃຫ້ທ່ານຄຳນຶງໄວ້ວ່າ: ອາລົມມ່ວນຊື່ນ ແລະ ການສະແດງໃຫ້ເຫັນວ່າ ທ່ານສາມາດຍິ້ມຫົວໄດ້ ກໍສາມາດຊ່ວຍສ້າງການພົວພັນອັນດີກັບນັກຮຽນຂອງ ທ່ານໄດ້.

ອະນຸຍາດໃຫ້ນັກຮຽນສະແດງຄວາມຄິດເຫັນຂອງຕົນເອງ. ການໃຫ້ໂອກາດແກ່ນັກຮຽນແຕ່ລະຄົນໄດ້ເວົ້າຢູ່ໃນຫ້ອງຮຽນໃນໄລຍະເວລາ 2 ຫຼື 3 ອາທິດທຳອິດຂອງສົກຮຽນໃໝ່ຈະຊ່ວຍຊຸກຍູ້ ໃຫ້ນັກຮຽນມີສ່ວນຮ່ວມໃນການສົນທະນາຢູ່ໃຫ້ຫ້ອງຮຽນ ທີ່ມີນັກຮຽນຈຳນວນຫຼາຍ. ໃຫ້ຈຳໄວ້ວ່າ: ຖ້າປ່ອຍເວລາໄປດົນເທົ່າໃດ ໂດຍທີ່ນັກຮຽນບໍ່ໄດ້ມີໂອກາດເວົ້າຢູ່ໃນຫ້ອງຮຽນມັນກໍຈະມີຄວາມຫຍຸ້ງຍາກຫຼາຍ ໃນການທີ່ຈະໃຫ້ເຂົາເຈົ້າມີການປະກອບສ່ວນໃນຫ້ອງ ແລະ ທ່ານເອງກໍຈະເສຍໂອກາດອັນມີຄ່າທີ່ຈະຮຽນຮູ້ກ່ຽວກັບເຂົາ ແລະ ບໍ່ຮູ້ແມ້ກະທັ້ງວ່າ ນັກຮຽນໄດ້ຮຽນຮູ້ອັນໃດແດ່. ໃນໄລຍະ 2-3 ອາທິດ ທຳອິດຂອງສົກຮຽນ, ທ່ານອາດຈະໃຫ້ນັກຮຽນເຮັດວຽກຢູ່ໃນກຸ່ມນ້ອຍກ່ອນ ຍ້ອນວ່າມັນຈະເປັນການງ່າຍ ສຳລັບ ນັກຮຽນຜູ້ທີ່ຂີ້ອາຍ ຈາກນັ້ນຈຶ່ງໃຫ້ເຂົາປະກອບສ່ວນຢູ່ວົງກວ້າງ.

ຊຸກຍູ້ໃຫ້ນັກຮຽນຕັ້ງຄຳຖາມ ແລະ ມີຄຳເຫັນ. ມີນັກຮຽນຈຳນວນຫຼາຍທີ່ຂີ້ອາຍ ຫຼື ອຶດອັດທີ່ຈະຕັ້ງຄຳຖາມ ຫຼື ປະກອບຄຳເຫັນຢູ່ຕໍ່ໜ້າໝູ່ເພື່ອນ. ມີຄູສອນຈຳນວນໜຶ່ງບໍ່ມັກນັກຮຽນຕັ້ງຄຳຖາມ ເພາະວ່າພວກເພິ່ນຮູ້ສຶກວ່າ ມັນເປັນການລົບຫລູ່ອຳນາດຂອງພວກເພິ່ນ. ຢ່າງໃດກໍດີ, ຄຳຖາມເປັນພາຫະນະອັນມີຄຸນຄ່າ ໃນການນຳເອົາຄວາມຄິດເຫັນຍ້ອນກັບກ່ຽວກັບສິ່ງທີ່ນັກຮຽນກຳລັງຮຽນວ່າມີອັນໃດແດ່ ທີ່ນັກຮຽນມີຄວາມຫຍຸ້ງຍາກ ແລະ ທ່ານຈະເຮັດການສິດສອນແນວໃດ ເພື່ອໃຫ້ມີຄວາມເຂົ້າໃຈງ່າຍ ແລະ ມີຄວາມມ່ວນຊື່ນສຳລັບທ່ານ ແລະ ນັກຮຽນຂອງທ່ານ.

ຊຸກຍູ້ໃຫ້ນັກຮຽນຕັ້ງຄຳຖາມ ຫຼື ໃຫ້ຄຳເຫັນ ກ່ຽວກັບສິ່ງທີ່ເຂົາເຈົ້າກຳລັງຮຽນ. ຄູສອນຈຳນວນໜຶ່ງໃຊ້ວິທີ "ກະຕຸ້ນນັກຮຽນ". ຢູ່ໃນເຕັກນິກນີ້ ຄູສອນຕັ້ງຄຳຖາມ ຫຼື ໃຫ້ຄຳຖາມອັນໃດອັນໜຶ່ງ ເພື່ອໃຫ້ນັກຮຽນຕອບ ໂດຍອີງຕາມປະສົບການຂອງເຂົາເຈົ້າ ຫຼືສິ່ງທີ່ເຂົາເຈົ້າກຳລັງຮຽນ. ການກະຕຸ້ນຂໍ້ທຳອິດອາດເວົ້າວ່າ "ຫ້ອງຮຽນຂອງພວກເຮົາມີນັກຮຽນຈຳນວນຫຼາຍ, ຄູຕ້ອງການ

ຢາກຮູ້ຈັກກັບພວກນ້ອງທຸກຄົນໃຫ້ໄວເທົ່າທີ່ຈະເປັນໄປໄດ້. ດັ່ງນັ້ນໃຫ້ບອກຄູກ່ຽວກັບພວກນ້ອງ ເອງວ່າອັນໃດ ທີ່ພວກນ້ອງມັກ ແລະ ບໍ່ມັກ, ພວກນ້ອງມີປະສົບການທີ່ເປັນໜ້າສົນໃຈອັນໃດແດ່ ແລະ ຄວາມຮູ້ສຶກຂອງພວກນ້ອງຕໍ່ກັບໂຮງຮຽນ. ຄຳຖາມເພື່ອກະຕຸ້ນອີກອັນໜຶ່ງອາດເປັນ " ພວກນ້ອງມີຄຳຖາມອັນໃດແດ່ກ່ຽວກັບ..." ແລະ ໃຫ້ເວລາແກ່ນັກຮຽນເພື່ອສ້າງຄຳຖາມຂອງ ເຂົາ. ມີຄູສອນຈຳນວນໜຶ່ງສະເໜີວ່າ ໃຫ້ນັບໃນໃຈແຕ່ 1-10 ເພື່ອໃຫ້ເວລາແກ່ນັກຮຽນຄິດຫາຄຳ ຕອບ. ຖ້າບໍ່ມີນັກຮຽນຜູ້ໃດຕອບ ກໍ່ໃຫ້ຖາມຫາຜູ້ອາສາສະໝັກ ເພື່ອສະໜອງສ່ຽງລວມຈຸດສະເພາະ ໃດໜຶ່ງ ທີ່ໄດ້ເຮັດຢູ່ໃນຫ້ອງຮຽນ ຫຼື ໃນເວລາດຳເນີນກິດຈະກຳ. ການຕອບຮັບທີ່ວ່າ "ຂ້ອຍດີໃຈ ທີ່ນ້ອງຖາມສິ່ງນັ້ນ" ຫຼື "ອັນນັ້ນເປັນຄຳຖາມທີ່ດີ" ຈະເປັນການຊຸກຍູ້ໃຫ້ ນັກຮຽນສືບຕໍ່ຕັ້ງຄຳຖາມ ແລະ ໃຫ້ຄຳຄິດເຫັນ. ການສະແດງປະຕິກິລິຍາແບບບໍ່ປາກບໍ່ເວົ້າເຊັ່ນ ຍິ້ມ ຫຼື ງຶກຫົວ ກໍ່ສາມາດ ສະແດງໃຫ້ເຫັນເຖິງ ການສະໜັບສະໜູນຂອງທ່ານໃຫ້ນັກຮຽນຕັ້ງຄຳຖາມ ແລະ ໃຫ້ຄຳເຫັນ ເຊັ່ນດຽວກັນ.

ຈົ່ງຍອມຮັບແນວຄວາມຄິດທີ່ຍາກ ແລະ ຄາດຄະເນຄວາມຫຍຸ້ງຍາກ. ນັກຮຽນທີ່ຢູ່ໃນຫ້ອງ ທີ່ມີນັກຮຽນຈຳນວນຫຼາຍແມ່ນບໍ່ຢາກຕັ້ງຄຳຖາມ ເພາະເຂົາເຈົ້າຢ້ານວ່າຈະເປັນການສະແດງໃຫ້ ນັກຮຽນຄົນອື່ນ ເຫັນວ່າເຂົາເຈົ້າບໍ່ເຂົ້າໃຈໃນສິ່ງທີ່ຄູກຳລັງສອນ. ເຂົາເຈົ້າບໍ່ມີຄວາມຮອບຮູ້ກ່ຽວ ກັບສິ່ງນັ້ນ. ເພື່ອທີ່ຈະຊ່ວຍເຂົາເຈົ້າແກ້ໄຂຄວາມຢ້ານກົວ ທ່ານຕ້ອງບອກໃຫ້ເຂົາຮັບຮູ້ວ່າມັນມີ ຄວາມຫຍຸ້ງຍາກ ໃນການເຂົ້າໃຈບົດຮຽນໃນຄັ້ງທຳອິດ. ໃນການອະທິບາຍບົດຮຽນ ຫຼື ແນວຄວາມ ຄິດທີ່ຍາກນີ້ ທ່ານ ອາດເວົ້າ ກ່ຽວກັບຄວາມຫຍຸ້ງຍາກທີ່ ທ່ານ ເຄີຍມີໃນເວລາທ່ານຮຽນບົດຮຽນນີ້ ແລະ ອະທິບາຍວິທີ ທີ່ທ່ານໃຊ້ ເພື່ອຊ່ວຍການຮຽນ ແລະ ຈົດຈຳບົດຮຽນນັ້ນໄດ້. ກ່ອນຂຶ້ນຫ້ອງ ຮຽນ, ພາຍຫຼັງທີ່ ທ່ານ ສຳເລັດການ ແຕ່ງບົດສອນ, ໃຫ້ຖາມທ່ານເອງ ວ່າ "ມີອັນໃດແດ່ທີ່ອາດ ເຮັດໃຫ້ນັກຮຽນພົບກັບຄວາມຫຍຸ້ງຍາກ ໃນການຕິດຕາມບົດຮຽນນີ້? ມີຕົວຢ່າງອັນໃດອາດເຮັດ ໃຫ້ເຂົາເຈົ້າເຂົ້າໃຈໄດ້ດີຂຶ້ນ?" ມີຄູສອນຈຳນວນໜຶ່ງເຮັດການບັນທຶກປະຈຳວັນ ກ່ຽວກັບສິ່ງທີ່ນັກ ຮຽນເຄີຍຕອບຜິດຢູ່ໃນວຽກທີ່ມອບໝາຍໃຫ້, ຢູ່ໃນບົດກອດກາ ຫຼື ຄຳຖາມທີ່ນັກຮຽນຍົກຂຶ້ນມາ ຫຼາຍກວ່າໝູ່ ເພື່ອເປັນການຈື່ຈຳ ແລະ ເພື່ອຈະເຂົ້າໃຈວ່າອັນໃດທີ່ນັກຮຽນເຫັນວ່າມັນຍາກທີ່ສຸດ.

ໃຫ້ຈື່ຈຳໄວ້ວ່າ: ໂດຍການສະແດງໃຫ້ເຫັນເຖິງຄວາມຫຍຸ້ງຍາກ ແລະ ການຫາທາງປ້ອງ ກັນມັນໄວ້ລ່ວງໜ້າ, ຈະເຮັດໃຫ້ຄວາມສ່ຽງທີ່ນັກຮຽນຮູ້ສຶກວ່າຈະຖືກດູໝິ່ນ ຫຼື ເຮັດໃຫ້ນັກຮຽນລະ ອາຍຕໍ່ໜ້າຜູ້ອື່ນໆ ຖືກຫຼຸດລົງ.

ມີເວລາພຽງພໍ. ຂໍ້ເສຍປຽບທີ່ໃຫຍ່ຫຼວງທີ່ສຸດຂອງຫ້ອງຮຽນທີ່ມີນັກຮຽນຫຼາຍ ແມ່ນອັດຕາ ສ່ວນຂອງນັກຮຽນຕໍ່ຄູມີສູງ. ວິທີການເພື່ອຈັດການກັບບັນຫານີ້ ແມ່ນເຮັດໃຫ້ມີເວລາພຽງພໍກັບ ນັກຮຽນຕອນກ່ອນ ແລະ ຫຼັງເວລາສິດສອນ. ກ່ອນຈະເຂົ້າຫ້ອງຮຽນ ທ່ານອາດຈະຍ່າງໄປຕາມ ເດີ່ນໂຮງຮຽນ ຫຼື ອ້ອມຫ້ອງຮຽນ ແລະ ຖາມນັກຮຽນວ່າ ມື້ນີ້ເຂົາເຈົ້າມີຄວາມຮູ້ສຶກແນວໃດ. ເມື່ອສອນແລ້ວພໍດີ ໃຫ້ທ່ານເວົ້ານຳນັກຮຽນວ່າ ທ່ານມີເວລາພຽງພໍເພື່ອຕອບຄຳຖາມທີ່ນັກຮຽນ

ມີ. ໃນແຕ່ລະມື້ ໃຫ້ຈົ່ງເວລານອກໄວ້ 10-15 ນາທີ ສຳລັບ ໃຫ້ນັກຮຽນມາຫາ ແລະ ຕັ້ງຄຳຖາມ ນຳທ່ານ, ບາງຄັ້ງ ຄຳຖາມນັ້ນ ເປັນຄຳຖາມທີ່ ເຂົາເຈົ້າບໍ່ຕ້ອງການຖາມຢູ່ຕໍ່ໜ້າຄົນອື່ນ. ໃນມື້ໜຶ່ງ ທ່ານສາມາດຕັ້ງເປົ້າໝາຍຈຳນວນນັກຮຽນໄວ້ປະມານ 5 ຄົນ ຫຼື ຫຼາຍກວ່ານີ້ ແລະ ໂອ້ລົມນຳເຂົາ ເຈົ້າ ກ່ຽວກັບໂຮງຮຽນ ຫຼື ຫ້ອງຮຽນຂອງທ່ານ. ໂດຍທົ່ວໄປ, ໃຫ້ຮູ້ຈັກຊື່ນັກຮຽນ ແລະ ຮຽນຮູ້ບາງ ສິ່ງບາງຢ່າງກ່ຽວກັບເຂົາເຈົ້າ ເປັນລາຍບຸກຄົນ.

ໃຫ້ຈື່ຈຳໄວ້ວ່າ: ຍິ່ງທ່ານມີຄວາມໃກ້ຊິດທາງດ້ານກິລິຍາທ່າທາງ ແລະ ຄວາມສົນໃຈອັນ ແທ້ຈິງກັບນັກຮຽນໄດ້ຫຼາຍເທົ່າໃດ, ນັກຮຽນກໍຈະມີຄວາມສະບາຍໃຈໃນການພົບປະ, ເວົ້າລົມນຳ ທ່ານ ແລະ ເຊື່ອຟັງຄວາມທ່ານຫຼາຍເທົ່ານັ້ນ.

ໃຫ້ເອົາໃຈໃສ່ນັກຮຽນເປັນລາຍບຸກຄົນ. ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍຈະແຕກຕ່າງ ຈາກຫ້ອງທີ່ມີນັກຮຽນຈຳນວນໜ້ອຍ ຢູ່ບ່ອນວ່າ ນັກຮຽນທີ່ຕ້ອງການຄວາມເອົາໃຈໃສ່ຈາກທ່ານ ຈະມີຫຼາຍ ຂຶ້ນ. ນັກຮຽນຈຳນວນໜຶ່ງຈະຮຽນໄດ້ດີ ບໍ່ວ່າຈະຢູ່ຫ້ອງຮຽນທີ່ມີນັກຮຽນຈຳນວນໜ້ອຍ ຫຼື ຈຳນວນຫຼາຍກໍຕາມ, ແຕ່ສຳລັບນັກຮຽນຜູ້ທີ່ຕ້ອງການຄຳແນະນຳຈາກຄູຂ້ອນຂ້າງຫຼາຍ ຈະພົບ ກັບຄວາມຫຍຸ້ງຍາກໃນ ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ. ບັນຫາແນວນີ້ສາມາດຈັດການໄດ້ ດ້ວຍຫຼາຍວິທີເຊັ່ນ: ຕິດຕາມຄວາມຄືບໜ້າຂອງນັກຮຽນ ໂດຍການທົບທວນເບິ່ງການມາຮຽນ ຂອງເຂົາເຈົ້າ, ເບິ່ງຜົນການສອບເສັງ ແລະ ການເຮັດວຽກບ້ານຂອງເຂົາເຈົ້າ, ການມີສ່ວນຮ່ວມຢູ່ ໃນຫ້ອງຮຽນ ແລະ ການຮຽນຂອງເຂົາເຈົ້າຢູ່ ໃນຫ້ອງອື່ນໆ. ທ່ານອາດເອົາຂໍ້ສອບທີ່ຮູ້ກັນດີຄື “ຂໍ້ສອບແບບປາລະໄນ” ທີ່ຄວບຄຸມເອົາຄວາມຮູ້ ແລະ ທັກສະທີ່ຕ້ອງການ ເພື່ອໃຫ້ເຂົ້າໃຈຫົວຂໍ້ ຫຼື ບົດຮຽນສະເພາະໃດໜຶ່ງ. ການເຮັດທົດສອບນີ້ອາດເຮັດ ໃນອາທິດທຳອິດຂອງມື້ເລີ່ມຕົ້ນສົກ ຮຽນໃໝ່ ຫລື ເຮັດໃນເວລາ ເລີ່ມຕົ້ນບົດຮຽນໃໝ່, ແຕ່ບໍ່ຕ້ອງກວດໃຫ້ຄະແນນ. ຈຸດມຸ່ງໝາຍອັນ ດຽວກໍຄື ເພື່ອຊ່ວຍທ່ານກຳນົດ ນັກຮຽນເຫລົ່ານັ້ນວ່າ ຜູ້ໃດມີຄວາມຕ້ອງການ ການຊ່ວຍເຫຼືອເພີ່ມ ເຕີມ ເພື່ອທ່ານຈະສາມາດເລີ່ມຕົ້ນເຮັດວຽກຮ່ວມກັບເຂົາເຈົ້າຕັ້ງແຕ່ຕົ້ນໄດ້. ທ່ານ ສາມາດເອົາໃຈ ໃສ່ນັກຮຽນກຸ່ມນ້ອຍກວ່າ ຊຶ່ງເປັນພວກທີ່ມີຄວາມຕ້ອງການຄວາມຊ່ວຍເຫລືອ ຈາກທ່ານຫຼາຍ ກວ່າໝູ່, ແທນທີ່ຈະເຮັດເປັນກຸ່ມໃຫຍ່ທີ່ມີຫຼາຍຄົນ. ຖ້າຫາກທ່ານສັງເກດເຫັນການປ່ຽນແປງ ທັນທີທັນໃດຢູ່ໃນພຶດຕິກຳ ຫຼື ຜົນການຮຽນຂອງນັກຮຽນ ທ່ານອາດໂອ້ລົມກັບນັກຮຽນເປັນລາຍ ບຸກຄົນ. ໃຫ້ຖາມນັກຮຽນເຖິງການດຳລົງຊີວິດຢູ່ໃນເຮືອນ ເນື່ອງຈາກວ່າມັນມີຜົນກະທົບຕໍ່ການຮຳ ຮຽນຂອງເຂົາເຈົ້າ. ຖ້າຫາກບັນຫາຂອງນັກຮຽນ ຢູ່ນອກເໜືອຄວາມອາດສາມາດທີ່ຈະແກ້ໄຂໄດ້ ທ່ານຄວນແນະນຳເຂົາເຈົ້າເຖິງບ່ອນທີ່ສາມາດໃຫ້ຄຳປຶກສາແກ່ເຂົາໄດ້ ຫຼື ແນະນຳການບໍລິການ ແບບອື່ນທີ່ອາດພໍມີ. ຖ້າຫາກມີນັກຮຽນຫຼາຍຄົນພົບກັບຄວາມຫຍຸ້ງຍາກ ທ່ານອາດຈັດຕັ້ງກຸ່ມ ເພື່ອທົບທວນອຸປະກອນການ ສອນ ແລະ ຕອບຄຳຖາມ.

ສ້າງກົດລະບຽບຢ່າງມີເຫດຜົນສຳລັບການປະພຶດຂອງນັກຮຽນ. ຫ້ອງຮຽນໝົດທຸກຫ້ອງ ຈຳເປັນຕ້ອງມີກົດລະບຽບ ເພື່ອດຳເນີນການຢ່າງມີປະສິດທິຜົນ ແລະ ກົດລະບຽບນັ້ນກໍມີຄວາມ ຈຳເປັນ ສຳລັບຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ. ນັກຮຽນຈຳເປັນຕ້ອງຮູ້ຈັກຂອບເຂດ ກໍຄື ຮູ້ຈັກວ່າ ເຂົາເຈົ້າຈະປະພຶດແນວໃດກັບຜູ້ອື່ນໆ ແລະ ນັບຖືສິດທິເຂົາເຈົ້າ. ໃຫ້ທ່ານອະທິບາຍກົດ ລະບຽບຂອງທ່ານ ໃນຕອນທຳອິດ ແລະ ເນັ້ນໜັກຄຸນຄ່າຂອງການຮ່ວມມື ແລະ ການເກງໃຈຄົນ ອື່ນ. ຂໍ້ແນະນຳທົ່ວໄປ ສຳລັບ ສ້າງກົດລະບຽບປະກອບດ້ວຍ ສິ່ງຕໍ່ໄປນີ້:

- ❖ ໃຫ້ເອົານັກຮຽນຂອງທ່ານເຂົ້າມາຮ່ວມໃນການສ້າງກົດລະບຽບຂອງຫ້ອງຮຽນ! ທ່ານອາດ ໃຊ້ວິທີການ “ເອົາສິດທິເປັນບ່ອນອີງ” ໂດຍເລີ່ມຕົ້ນກັບຫຼັກເກນ ທີ່ວ່າ “ເຈົ້າອາດເຮັດສິ່ງ ທີ່ເຈົ້າຕ້ອງການຢູ່ໃນຫ້ອງຮຽນ, ຢ່າງໜ້ອຍກໍ ແມ່ນສິ່ງທີ່ພວກເຈົ້າແຕະຕ້ອງເຖິງສິດທິ ຂອງຄົນອື່ນ ເຊັ່ນ ເພື່ອນຮ່ວມຫ້ອງຮຽນ ແລະ ຄູຂອງພວກເຈົ້າ”. ແລ້ວບອກໃຫ້ນັກຮຽນ ຂອງທ່ານກຳນົດ ການປະພຶດທີ່ສາມາດຍອມຮັບໄດ້ ແລະ ການປະພຶດທີ່ບໍ່ສາ ມາດຍອມຮັບໄດ້ ຍ້ອນວ່າມັນລະເມີດສິດທິຂອງຄົນອື່ນ. ການສ້າງກົດລະບຽບ ແມ່ນ ເພື່ອປະຕິບັດສິດທິໃຫ້ໄດ້ຮັບຜົນ ກໍຄື ການລົງໂທດຕໍ່ການຝ່າຝືນກົດລະບຽບ. ໃຫ້ຈຳໄວ້ ວ່າການລົງໂທດຄວນໃຫ້ເປັນໄປຕາມ ຍ້ອນການປະພຶດທີ່ບໍ່ດີ ແລະ ອີງຕາມລະບຽບ ການສັ່ງສອນເດັກແບບສ້າງສັນ ເພື່ອຊ່ວຍເຫຼືອນັກຮຽນ ໃຫ້ຮຽນຮູ້ການປະພຶດທີ່ດີ. ຕົວຢ່າງ ການໃຫ້ນັກຮຽນຢືນຢູ່ແຈຫ້ອງຮຽນ ແລະ ປິ່ນໜ້າເຂົ້າຫາຝາ ຍ້ອນວ່າລາວ ເຮັດແກ້ວແຕກ, ອັນນີ້ແມ່ນບໍ່ໄດ້ສອນຫຍັງໃຫ້ນັກຮຽນເລີຍ. ການໃຫ້ອະໄພແກ່ການ ກະທຳຂອງນັກຮຽນ ໂດຍໃຫ້ເຮັດອາມາໄມໂຕະອັນນີ້ ເປັນການສອນ ໃຫ້ນັກຮຽນມີ ຄວາມຮັບຜິດຊອບ.
- ❖ ໃຫ້ນັກຮຽນສ້າງ “ລະບຽບຂອງຫ້ອງຮຽນ” ຫຼື “ພະນັ່ງກຽດ, ຫໍຂ່າວຂອງຫ້ອງຮຽນ” ຊຶ່ງມີ ກົດລະບຽບ ແລະ ເອົາວາງສະແດງໄວ້ຢູ່ໃນຫ້ອງຮຽນ. ບອກໃຫ້ນັກຮຽນເຊັນ ເພື່ອສະ ແດງໃຫ້ເຫັນວ່າ ເຂົາເຈົ້າເຫັນດີປະຕິບັດກົດລະບຽບນັ້ນ, ຖ້າຫາກເຂົາເຈົ້າບໍ່ປະຕິບັດ ຕາມກົດລະບຽບ, ກໍໝາຍຄວາມວ່າ ເຂົາຕ້ອງຍອມຮັບຜິດຕາມລະບຽບ. ການປະພຶດ ທີ່ບໍ່ດີ ກໍຈະໜ້ອຍລົງ ຖ້າຫາກນັກຮຽນຕັດສິນໃຈ ທີ່ຈະຫຼີກເວັ້ນການລະເມີດກົດລະບຽບ ແລະ ສັນຍາທີ່ຈະຕາມກໍຈະເປັນຜົນເຮັດໃຫ້ມີການປະພຶດທີ່ດີຫຼາຍຂຶ້ນ.
- ❖ ໃຫ້ສ້າງກົດລະບຽບ ທີ່ເນັ້ນໜັກໃສ່ພຶດຕິກຳອັນເໝາະສົມ ຈັກ 2-3 ຂໍ້ເທົ່ານັ້ນ, ເຖິງວ່າ ທ່ານ ຫຼື ນັກຮຽນຈະສາມາດຈຳລະບຽບທີ່ຍາວໄດ້ກໍຕາມ. ກົດລະບຽບນັ້ນຕ້ອງຈະແຈ້ງ ແລະ ສາມາດ ເຂົ້າໃຈໄດ້ດີ. ຄວນຂຽນກົດລະບຽບນັ້ນໃຫ້ເປັນລັກສະນະພຶດຕິກຳ ເຊັ່ນ “ຈົ່ງຮັກສາມື ແລະ ຕີນໄວ້ນຳເຈົ້າເອງ” ເປັນສິ່ງຈະແຈ້ງ ແລະ ເປັນການສື່ສານທີ່ເປັນ ທາງບວກກວ່າ ຄຳວ່າ “ຢ່າຕີກັນ”.
- ❖ ໃຫ້ພິຈາລະນາເຮັດກົດລະບຽບ ຫຼື ກຳນົດຄວາມຄາດໝາຍໄວ້ສຳລັບປະເດັນຕໍ່ໄປນີ້ ເພື່ອເຮັດ ໃຫ້ຫ້ອງຮຽນມີຄວາມເປັນລະບຽບ.

ກ. ໃນຕອນເລີ່ມຕົ້ນ ຫຼື ຕອນທ້າຍຂອງຊົ່ວໂມງສອນ ຫຼື ຕອນທ້າຍຂອງມື້ຮຽນ, ການບັນທຶກການເຂົ້າຫ້ອງຮຽນຂອງນັກຮຽນເປັນແນວໃດ ແລະ ມີອັນໃດແດ່ທີ່ນັກຮຽນເຮັດ ແລະ ບໍ່ເຮັດໃນໄລຍະເວລານັ້ນ,

ຂ. ການນຳໃຊ້ວັດຖຸ ແລະ ອຸປະກອນ,

ຄ. ວິທີການຂໍອະນຸຍາດສຳລັບຄວາມຕ້ອງການ ທີ່ບໍ່ໄດ້ຄາດໝາຍໄວ້ ເຊັ່ນ ຂໍໄປຫ້ອງນ້ຳ ຫຼື ຂໍໄປແຫຼມສໍ

ງ. ວິທີການເຮັດວຽກຢູ່ກັບບ່ອນ ແລະ ເຮັດວຽກຢູ່ໃນກຸ່ມທີ່ເປັນເອກະລາດ .

ຈ. ວິທີທີ່ນັກຮຽນຈະຖາມ ຫຼື ຕອບຄຳຖາມ.

❖ ໃຫ້ເລືອກເອົາກິດລະບຽບ ທີ່ສາມາດສ້າງໃຫ້ສະພາບແວດລ້ອມຫ້ອງຮຽນເປັນລະບຽບ ແລະ ສົ່ງເສີມການຮຽນຮູ້ ໃຫ້ໄດ້ຮັບຜົນສຳເລັດ. ຢ່າສ້າງກິດລະບຽບຫ້ອງຮຽນ ທີ່ທ່ານບໍ່ມີຄວາມພໍໃຈ ຫຼື ບໍ່ສາມາດເຮັດໄດ້ ເພື່ອນຳໄປປະຕິບັດຕະຫຼອດໄປ. ຍິ່ງໄປກວ່ານັ້ນ, ໃຫ້ເລືອກເອົາກິດລະບຽບທີ່ເຫັນດີເປັນເອກະສັນນຳກັນ ຫຼື ຍອມຮັບຈາກທຸກໆຄົນໃນໂຮງຮຽນ. ຖ້າຫາກມີນັກຮຽນຮູ້ວ່າ ເຂົາເຈົ້າບໍ່ສາມາດປະພຶດແບບໃດໜຶ່ງ ຢູ່ໃນຫ້ອງຮຽນຂອງທ່ານໄດ້ ແຕ່ເຂົາພັດສາມາດເຮັດໄດ້ຢູ່ໃນຫ້ອງຮຽນອື່ນ ເຂົາເຈົ້າຈະຢາກລອງເຮັດສິ່ງທີ່ຜິດໆນັ້ນ ເພື່ອເບິ່ງວ່າເຂົາເຈົ້າຈະສາມາດຫລົບຫລີກການກະທຳຜິດໄດ້ຊ່ຳໃດ. ສະນັ້ນ ໃຫ້ທົບທວນກິດລະບຽບຄືນຢ່າງເປັນປົກກະຕິເພື່ອເບິ່ງວ່າລະບຽບອັນໃດບໍ່ມີຄວາມຈຳເປັນອີກແລ້ວ.ຖ້າຫາກມີອັນໃດບໍ່ຈຳເປັນອີກແລ້ວ, ກໍໃຫ້ຍ້ອງຍໍສັນລະເສີນນັກຮຽນ ແລະ ໃຫ້ຖາມນັກຮຽນວ່າມີລະບຽບອັນໃດອີກ ທີ່ມີຄວາມຈຳເປັນ.

ນຳໃຊ້ເຕັກນິກການໃສ່ລະບຽບວິໄນແບບສ້າງສັນ. ນັກຮຽນໃນຫ້ອງຮຽນຈະປະພຶດແນວບໍ່ດີ ຫຼື ຝ່າຝືນກິດລະບຽບ ມັນບໍ່ສຳຄັນວ່າ ຫ້ອງຮຽນນັ້ນຈະມີນັກຮຽນຫລາຍ ຫຼື ໜ້ອຍກໍຕາມ. ມັນເປັນເລື່ອງປົກກະຕິຂອງການວິວັດທະນາການຂອງເຂົາເຈົ້າເອງ ແລະ ບໍ່ມີຜົນສະທ້ອນມາສູ່ທ່ານ. ເມື່ອເວລານັກຮຽນປະພຶດແນວບໍ່ດີ ຄູສອນອາດນຳໃຊ້ການລົງໂທດທາງດ້ານຮ່າງກາຍ ຊຶ່ງເປັນວິທີການເພື່ອຄວບຄຸມສະຖານະການ. ການໃຊ້ເຫດຜົນນີ້ເປັນເລື່ອງທຳມະດາລະຫວ່າງ ຄູສອນຜູ້ທີ່ກຳລັງປະເຊີນ ກັບຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ພິເສດແມ່ນຄູສອນຢູ່ໃນຫ້ອງທີ່ບໍ່ໄດ້ສ້າງກິດລະບຽບ ຫຼື ບໍ່ມີລະບຽບແບບແຜນທີ່ໃຊ້ປະຈຳ. ນັກຮຽນບໍ່ໄດ້ຮູ້ຈັກສິ່ງທີ່ຄາດໝາຍໄວ້ ແລະ ຜົນໄດ້ຮັບຈາກການປະພຶດທີ່ບໍ່ດີ, ຄູສອນບໍ່ໄດ້ໃຊ້ເວລາ ເພື່ອສ້າງການພົວພັນທີ່ດີກັບນັກຮຽນ ເພື່ອເຂົາເຈົ້າຈະຕ້ອງການໃຫ້ເຂົາເປັນຄົນດີ.ອັນນີ້ອາດເປັນຍ້ອນວິທີການຄຸ້ມຄອງຫ້ອງຮຽນ ແບບໃຊ້ສິດອຳນາດ, ມີຄູສອນຄົນໜຶ່ງເວົ້າວ່າ: “ຂ້ອຍເປັນຄູສອນ ແລະ ຂ້ອຍກໍຈະເຮັດສິ່ງຕ່າງໆ ຕາມວິທີການຂອງຂ້ອຍ!“ ໃນຄວາມພະຍາຍາມ ທີ່ຈະຄວບຄຸມຫ້ອງຮຽນ, ຄູອາດໃຊ້ວິທີການລົງໂທດທາງດ້ານຮ່າງກາຍ ເພື່ອພະຍາຍາມ ແລະ ເຮັດໃຫ້ ນັກຮຽນມີຄວາມຢ້ານກົວ, ແລະ ດ້ວຍຄວາມຫວັງວ່ານັກຮຽນຈະບໍ່ປະພຶດແນວບໍ່ດີ (ແຕ່ວ່າເຂົາເຈົ້າ ກໍຍັງເຮັດຢູ່). ເຖິງຢ່າງໃດກໍດີການ

ນຳໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ບໍ່ໄດ້ຊຸກຍູ້ໃຫ້ນັກຮຽນໄດ້ຮຽນຮູ້ຈາກຄູເລີຍ, ມີແຕ່ຢ້ານ ກົວຄູເທົ່ານັ້ນ. ພ້ອມນັ້ນ ມັນຍັງເປັນການທຳລາຍສະພາບແວດລ້ອມທາງ ດ້ານຈິດຕະສາດສັງຄົມ ຂອງຫ້ອງຮຽນອີກດ້ວຍ. ຍິ່ງໄປກວ່ານັ້ນການລົງໂທດທາງດ້ານຮ່າງກາຍ ຍັງເປັນການລະເມີດ**ສິດ ທິມະນຸດ** ແລະ ຢູ່ໃນຫຼາຍປະເທດ ຖືວ່າ **ເປັນສິ່ງທີ່ຜິດກົດໝາຍ**ອີກດ້ວຍ.

ການລົງໂທດທາງດ້ານຮ່າງກາຍມີຄວາມໝາຍວ່າ ເພື່ອຄວບຄຸມຄວາມປະພຶດຂອງນັກ ຮຽນ, ການລົງໂທດແບບສ້າງສັນ ໝາຍວ່າ ເພື່ອພັດທະນາຄວາມປະພຶດຂອງນັກຮຽນ, ໂດຍສະ ເພາະໃນດ້ານການປະຕິບັດ. ແທນທີ່ຈະເຮັດການລົງໂທດທາງດ້ານຮ່າງກາຍ ມັນຍັງມີເຕັກນິກ ການໃສ່ວິໄນວິທີອື່ນ ອີກທີ່ສາມາດນຳມາໃຊ້ໄດ້. ວິທີການຕໍ່ໄປນີ້ ແມ່ນການປະຕິບັດວິໄນແບບ ສ້າງສັນ ຊຶ່ງທ່ານສາມາດເອົາໄປໃຊ້ ເພື່ອນຳພານັກຮຽນຜູ້ທີ່ປະພຶດແນວບໍ່ດີ ທີ່ຕ້ອງໄດ້ຮັບການ ເອົາໃຈໃສ່:

- ໃຫ້ເບິ່ງເຂົາວ່າເປັນຄົນດີ; ໃຫ້ຍ້ອງຍໍເຂົາເຈົ້າເວລາເຂົາເຈົ້າບໍ່ໄດ້ມີເຈດຕະນາປະພຶດ ຜິດ.
- ຢ່າໃສ່ໃຈເລື່ອງການປະພຶດຂອງເດັກຖ້າພໍເປັນໄປໄດ້, ໃຫ້ເບິ່ງນັກຮຽນໃນທາງບວກ ໃນໄລຍະເວລາມ່ວນຊື່ນ.
- ສອນນັກຮຽນໃຫ້ຮູ້ການຂໍຄວາມເອົາໃຈໃສ່ (ຕົວຢ່າງ ໃຫ້ເຮັດບັດ " ກະລຸນາເອົາໃຈ ໃສ່ຂ້ອຍແດ່" ຊຶ່ງເຂົາຈະຍົກຂຶ້ນໃນເວລາເຂົາມີຄຳຖາມ.
- "ໃຊ້ແສງຕາ", ແຕ່ບໍ່ປາກ.
- ຢືນຢູ່ໃກ້ໆນັກຮຽນ ແທນທີ່ຈະຢືນຢູ່ໄກ (ຖ້າທ່ານຢືນຢູ່ໃກ້ນັກຮຽນ ເຂົາກໍບໍ່ມີຄວາມ ຈຳເປັນ ທີ່ຈະຕ້ອງສະແດງ ການຂໍຄວາມເອົາໃຈໃສ່ຈາກທ່ານ).
- ເປົ້າໝາຍ-ບອກໃຫ້ຢຸດ-ບອກໃຫ້ເຮັດ; ເປົ້າໝາຍຕາມຊື່ນັກຮຽນ, ກຳນົດວ່າແມ່ນພຶດ ຕິກຳອັນໃດ ທີ່ເຂົາຈະຕ້ອງເຊົາເຮັດ, ບອກນັກຮຽນວ່າແມ່ນອັນໃດ ທີ່ລາວຈະຕ້ອງ ເຮັດໃນຂະນະນັ້ນ, ໃຫ້ລາວຕັດສິນໃຈເອງ ກ່ຽວກັບ ສິ່ງທີ່ລາວຈະເຮັດໃນຂັ້ນຕໍ່ໄປ ແລະ ຜົນໄດ້ຮັບຂອງການກະທຳຂອງລາວ.
- ເຮັດສິ່ງທີ່ບໍ່ໄດ້ຄາດໝາຍເອົາໄວ້ ເຊັ່ນ ປິດໄຟ, ເປີດສຽງດົນຕຣີ, ອ່ອນສຽງພວກເຈົ້າ ລົງ, ປ່ຽນສຽງພວກເຈົ້າ, ໃຫ້ເວົ້າໃສ່ຝາຫ້ອງຮຽນ.
- ກວນໃຈນັກຮຽນ ເຊັ່ນ ຕັ້ງຄຳຖາມໂດຍກົງ, ຂໍຄວາມກະລຸນາ, ໃຫ້ທາງເລືອກ ແລະ ປ່ຽນແປງກິດຈະກຳ.

ບາງຄັ້ງ ຄູສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍ ໄດ້ໃຊ້ການລົງໂທດທາງດ້ານຮ່າງກາຍ ໃນເວລາທີ່ເຂົາເຈົ້າໃຈຮ້າຍ ແລະ ຜິດຫວັງ. ມັນຍັງມີວິທີທາງອັນດີຫຼາຍຢ່າງ ເພື່ອທີ່ຈະຈັດການ ກັບຄວາມໃຈຮ້າຍ ຫຼື ຄວາມຜິດຫວັງ. ຄູສອນຈຳນວນໜຶ່ງບອກນັກຮຽນຂອງເຂົາເຈົ້າວ່າ "ຂ້ອຍ ຕ້ອງການເວລາ ເພື່ອທີ່ຈະສະຫງົບຈິດໃຈ; ຂ້ອຍຮູ້ສຶກໃຈຮ້າຍທີ່ສຸດດຽວນີ້." ຄູບາງຄົນກໍສະຫງົບ

ອາລົມລົງໂດຍ ການນັບຮອດ 10 ຫຼື ໂດຍວິທີການຍ່າງອອກຈາກຫ້ອງໄປໃນເວລາໃດເວລາໜຶ່ງ. ຄູບາງຄົນກໍບັນລະຍາຍຄວາມຮູ້ສຶກຂອງເຂົາເຈົ້າໃຫ້ນັກຮຽນຮູ້ ເພື່ອໃຫ້ນັກຮຽນໄດ້ເຂົ້າໃຈວ່າ ອັນໃດທີ່ລົບກວນເຂົາເຈົ້າ ແລ້ວນັກຮຽນກໍຮຽນຮູ້ວ່າ ບໍ່ຄວນເຮັດອັນໃດ ແລະ ເປັນຫຍັງ. ນັກຮຽນອາດເຮັດຄືນອີກ ແຕ່ວ່າ ເຂົາເຈົ້າຕ້ອງຮັບຜິດຊອບຕໍ່ການກະທຳຂອງເຂົາເຈົ້າ ແລະ ຈະຕ້ອງຈັດການກັບຜົນທີ່ຕາມມາ ຈະແມ່ນກໍລະນີໃດກໍຕາມ. ຂໍແນະນຳໃຫ້ທ່ານຈົ່ງສ້າງແຜນລະບຽບວິໄນອັນດີ ເພື່ອກວມລວມເອົາວິທີການເຫຼົ່ານີ້.

ເອົານັກຮຽນເຂົ້າມາຮ່ວມນຳ. ນັກຮຽນສາມາດຊ່ວຍ ໃນການຄຸ້ມຄອງສະພາບແວດລ້ອມທາງດ້ານຈິດຕະສາດ-ສັງຄົມ ຂອງຫ້ອງຮຽນໄດ້ຫຼາຍທີ່ສຸດ. ເພື່ອຈັດການກັບການປະພຶດທີ່ບໍ່ດີ ນັກຮຽນສາມາດເລືອກຕັ້ງ “ຄະນະກຳມະການລະບຽບວິໄນຂອງຫ້ອງຮຽນ” ເພື່ອສ້າງກົດລະບຽບການປະພຶດຂອງຫ້ອງຮຽນ, ກຳນົດການລົງໂທດທີ່ເໝາະສົມ ແລະ ເພື່ອຕົກລົງວ່າຈະຄວນເຮັດອັນໃດ ໃນກໍລະນີມີການ ປະພຶດທີ່ບໍ່ດີ.

ສິ່ງທ້າທາຍອີກອັນໜຶ່ງ ສຳລັບ ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ແມ່ນຈະເຮັດການຕິດຕາມກຳກັບສິ່ງທີ່ເກີດຂຶ້ນກັບນັກຮຽນຂອງທ່ານຢູ່ພາຍໃນຫ້ອງຮຽນ ແລະ ນອກຫ້ອງຮຽນແນວໃດ. ໃຫ້ພິຈາລະນາສ້າງຕັ້ງ “ທີມງານຄຸ້ມຄອງນັກຮຽນ“ . ກຸ່ມນັກຮຽນທີ່ຖືກເລືອກຕັ້ງມີປະມານ 4-6 ຄົນ ຊຶ່ງເປັນຕົວ ແທນໃຫ້ແກ່ຜົນປະໂຫຍດຂອງນັກຮຽນທຸກຄົນ ແລະ ໃຫ້ເຂົາເຈົ້າມາປະຊຸມຮ່ວມກັບທ່ານ ເພື່ອແລກປ່ຽນຄວາມຄິດເຫັນ ກ່ຽວກັບ ສິ່ງທີ່ຈະເຮັດໃຫ້ຫ້ອງຮຽນມີສະພາບທີ່ດີ ກວ່າເກົ່າ.

ຄຳຖາມ

1. ການຈັດພື້ນທີ່ຂອງຫ້ອງຮຽນຄວນຈັດຄືແນວໃດ?
2. ການຈັດມຸມຮຽນຮູ້ຄູຄວນຈັດຄືແນວໃດ?
3. ການຈັດພື້ນທີ່ວາງສະແດງຄູຄວນຈັດຄືແນວໃດ?
4. ມຸມອ່ານໜັງສືຄວນຈັດແນວໃດຈຶ່ງຈະເໝາະສົມ?
5. ການຈັດວາງອຸປະກອນໃນຫ້ອງຮຽນຄູຄວນຈັດວາງແນວໃດ?
6. ການຈັດສະພາບແວດລ້ອມທາງຈິດຕະສາດ - ສັງຄົມຄູຄວນຈັດແນວໃດ?

ບົດທີ 5
ການຈັດການຮຽນເປັນກຸ່ມ ແລະ ການຮຽນຮູ້ແບບຮ່ວມມື

5.1 ວິທີຕ່າງໆສຳລັບການເຮັດວຽກເປັນກຸ່ມ

ການສອນທີ່ມີປະສິດທິຜົນຫມາຍເຖິງການປະສົມປະສານວິທີສິດສອນ ແລະ ຮຽນຮູ້. ສິ່ງດັ່ງກ່າວ ຈະສະໜອງຄວາມຕ້ອງການໃຫ້ເດັກເປັນລາຍບຸກຄົນ ແລະ ຈະເຮັດໃຫ້ຫ້ອງຮຽນ ເປັນສະຖານທີ່ມີຊີວິດຊີວາ, ມີຄວາມທ້າທາຍ ແລະ ເປັນເພື່ອນມິດ. ທ່ານສາມາດທີ່ຈະນຳໃຊ້ວິທີ ທີ່ພໍເປັນໄປໄດ້ 4 ວິທີດັ່ງນີ້:

(1) **ການສອນນັກຮຽນໂດຍກົງຫມົດຫ້ອງ.** ວິທີນີ້ໃຊ້ໄດ້ຜົນດີ ສະເພາະສຳລັບການນຳເຂົ້າສູ່ ຫົວຂໍ້ບົດຮຽນ, ມີຄວາມຈຳເປັນຢູ່ບ່ອນວ່າ ທ່ານຕ້ອງກຽມຄຳຖາມໄວ້ລ່ວງໜ້າ ເພື່ອຖາມເດັກ ໃນຂັ້ນຮຽນທີ່ແຕກຕ່າງກັນ ແລະ ຄວາມສາມາດແຕກຕ່າງກັນ. ທ່ານສາມາດໃຊ້ ການສິດ ສອນແບບໝົດຫ້ອງ ສຳລັບການເລົ່າເລື່ອງ/ ນິທານ ຫລື ການສ້າງບົດເລື່ອງ ຂຶ້ນມາຮ່ວມກັບ ເດັກ, ສຳລັບການຂຽນເພງ ຫລື ບົດກອນ, ສຳລັບເກມແກ້ບັນຫາ ຫລື ສຳລັບການເຮັດ ສຳຫລວດ. ເນື່ອງຈາກວ່າ ໃນແຕ່ ລະຫ້ອງ ເດັກຈະມີການພັດທະນາໃນລະດັບແຕກຕ່າງກັນ, ທ່ານຕ້ອງເລືອກ ແລະ ປັບເນື້ອໃນ ໃຫ້ເຫມາະສົມສຳລັບເດັກທຸກລະດັບ ແລະ ທຸກຄວາມ ສາມາດທີ່ທ່ານພວມສອນຢູ່.

ເພື່ອຊຸກຍູ້ **ເດັກທຸກຄົນ** ໃຫ້ມີສ່ວນຮ່ວມໃນທຸກກິດຈະກຳການຮຽນຮູ້ນັ້ນ, ພວກເຮົາອາດ ຕ້ອງສະໜອງງານກິດຈະກຳທີ່ແຕກຕ່າງກັນ ສຳລັບກຸ່ມເດັກທີ່ແຕກຕ່າງກັນ. ຍົກຕົວຢ່າງ: ສຳລັບກິດຈະ ກຳແບບດຽວກັນ, ກຸ່ມເດັກກຸ່ມໜຶ່ງອາດສາມາດຜະລິດບົດເລື່ອງ, ອີກກຸ່ມໜຶ່ງ ຂຽນປະໂຫຍກຕ່າງໆ ທີ່ຖືກຕ້ອງ ແລະ ອີກກຸ່ມສ້າງຕົວແບບ ຫລື ໂປສະເຕີ.

(2) **ການສອນໂດຍກົງກຸ່ມນັກຮຽນຫ້ອງດຽວກັນ (ໂດຍສະເພາະ ໃນຫ້ອງຄວບ).** ໃນຂະນະທີ່ທ່ານ ພວມ ສອນກຸ່ມໜຶ່ງນັ້ນ, ກຸ່ມອື່ນໆກໍເຮັດວຽກຂອງເຂົາໄປ. ການສອນແບບເພື່ອນສອນເພື່ອນ ສາມາດ ເປັນປະໂຫຍດໄດ້ໃນທີ່ນີ້ ໂດຍສະເພາະ ເມື່ອເດັກມີຄວາມໝັ້ນໃຈ. ຕອນທຳອິດ, ກຸ່ມຕ່າງໆຈະ ບໍ່ທັນໄດ້ພັດທະນາທັກສະຕ່າງໆເພື່ອ ທີ່ຈະສາມາດເຮັດວຽກໄດ້ ຢ່າງໝັ້ນຄົງ ໂດຍປາສະຈາກການໃຫ້ຄຳແນະນຳ. ແຕ່ດ້ວຍການເຝິກຝົນ ແລະ ການປະຕິບັດກິດຈະກຳ ທີ່ອີງໃສ່ທັກສະສະເພາະ, ພວກເຂົາຈະສາມາດຮຽນຮູ້ການເຮັດວຽກແບບ ຮ່ວມມື ກັນໄດ້.

(3) **ການສອນເປັນລາຍບຸກຄົນ** ແມ່ນການສອນທີ່ເກີດຂຶ້ນແບບຕົວຕໍ່ຕົວ. ສິ່ງດັ່ງກ່າວອາດເປັນ ການຊ່ອຍເດັກທີ່ຫລ້າຫລັງໝູ່ ຍ້ອນຂາດໂຮງຮຽນ, ເດັກຜູ້ທີ່ມີບັນຫາດ້ານການຮຽນຮູ້ ຫລື ຜູ້ທີ່ເຂົ້າມາຮຽນໃນຫ້ອງໃໝ່. ທ່ານຍັງອາດຈຳເປັນຕ້ອງສອນເປັນລາຍບຸກຄົນ ເພື່ອຊ່ອຍ "ເດັກ**ພອນສະຫວັນ**" ແລະ ຊຸກຍູ້ພວກເຂົາໃຫ້ເຮັດກິດຈະກຳທີ່ຍາກ ແລະ ທ້າທາຍກວ່າ.

ເຖິງຢ່າງໃດກໍຕາມ, ທ່ານຈຳເປັນຕ້ອງໃຊ້ເວລາສັ້ນໆສິດສອນແບບລາຍບຸກຄົນ ໃນລະຫວ່າງ ການສອນບົດຮຽນ ເພື່ອວ່າທ່ານຈະ ສາມາດສອນເດັກສ່ວນຫລວງຫລາຍໃນຫ້ອງຮຽນ.

(4) **ການສອນເປັນກຸ່ມນ້ອຍ** ແມ່ນການສອນທີ່ເກີດຂຶ້ນ ເມື່ອທ່ານແບ່ງນັກຮຽນຫມົດຫ້ອງອອກ ເປັນກຸ່ມຍ່ອຍເພື່ອຮຽນຮູ້. ນີ້ເປັນຍຸດທະສາດທີ່ມີປະສິດທິຜົນທີ່ສຸດ, ແຕ່ທ່ານຈຳເປັນຕ້ອງຈັດ ຕັ້ງ ແລະ ກຽມການເປັນຢ່າງດີ. ການກະກຽມຕ້ອງໃຊ້ເວລາ ແລະ ເດັກໆເອງກໍຕ້ອງໄດ້ຮັບ ການກະກຽມ ເພື່ອທີ່ຈະເຮັດວຽກເປັນກຸ່ມຮ່ວມກັນ. ເຖິງຈະໃຊ້ເວລາກໍຕາມ, ນີ້ແມ່ນວິຖີທາງ ທີ່ມີປະສິດທິຜົນທີ່ສຸດ ເພື່ອຕອບສະໜອງຄວາມຕ້ອງການຂອງຫ້ອງຮຽນ ທີ່ມີຄວາມຫລາກ ຫລາຍ.

5.2 ການໃຊ້ການຈັດກຸ່ມໃນຫ້ອງຮຽນແບບແຕກຕ່າງກັນ

ທ່ານສາມາດຈັດກຸ່ມເດັກນັກຮຽນໄດ້ດ້ວຍຫລາຍຮູບແບບ, ເຊັ່ນ: ຈັດກຸ່ມນັກຮຽນທີ່ຮຽນ ສະເພາະ ໃນຂັ້ນຮຽນດຽວກັນ, ກຸ່ມນັກຮຽນທີ່ຮຽນຫ້ອງຕ່າງກັນ, ຈັດກຸ່ມຕາມເພດດຽວກັນ, ກຸ່ມປະ ສົມເພດຍິງ ຊາຍ, ກຸ່ມທີ່ມີຄວາມສາມາດໃນລະດັບດຽວກັນ, ກຸ່ມທີ່ມີຄວາມສາມາດແຕກຕ່າງ ກັນ, ກຸ່ມທີ່ມີຄວາມສົນໃຈຄ້າຍຄືກັນ, ກຸ່ມສົງຄົມຫລືເພື່ອນກັນ, ກຸ່ມຄູ່, ກຸ່ມສາມ ຫລື ສີ່ຄົນ. ເດັກໆຈະໄດ້ຮັບຜົນປະໂຫຍດ ຈາກການຖືກຈັດເຂົ້າໃນກຸ່ມ ດ້ວຍວິທີຫລາກຫລາຍ ແລະ ໃນ ເວລາທີ່ແຕກຕ່າງກັນ.

ໃຫ້ປະຕິບັດແບບມີຄວາມຢືດຢຸ່ນ. ເຄື່ອນຍ້າຍເດັກໄປມາລະຫວ່າງກຸ່ມ. ເດັກຈຳເປັນຕ້ອງ ໄດ້ຮັບໂອກາດໄດ້ນັ່ງ ແລະ ເຮັດວຽກກັບເພື່ອນຮ່ວມຫ້ອງຫລາຍໆຄົນ ເທົ່າທີ່ພໍເປັນໄປໄດ້, ບໍ່ວ່າ ຈະເປັນ ຜູ້ໜຸ່ມກວ່າ ຫລື ແກ່ກວ່າ, ລວມທັງຜູ້ທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງກັນ. ສິ່ງນີ້ຈະຊ່ວຍ ສອນໃຫ້ເຂົາເປັນຄົນອົດທົນ ແລະ ຮູ້ຈັກຄວາມສາມາດ/ພອນສະຫວັນ ຂອງເດັກ ທຸກຄົນໃນຫ້ອງ.

ຄວນລະວັງການຕິດປ້າຍເດັກວ່າເປັນຜູ້ຮຽນຮູ້ຊ້າ/ຮັບຮູ້ຊ້າ. ເດັກບາງຄົນອາດຈະຮຽນຄະ ນິດສາດຫລ້າຫລັງກວ່າຜູ້ອື່ນ, ແຕ່ເຂົາອາດຈະເກັ່ງ ໂດຍສະເພາະໃນດ້ານພາກປະຕິບັດວຽກທີ່ ເຮັດດ້ວຍມື ເຊັ່ນ ການປະຕິບັດໂຄງການຕ່າງໆທາງວິທະຍາສາດ ຫລື ການສ້າງປຶ້ມອ່ານ ສຳລັບ ເດັກ. ພວກເຮົາຈຳເປັນຕ້ອງລະວັງ ເພາະວ່າເດັກຜູ້ທີ່ຮູ້ສຶກວ່າ ຖືກຄຸມອງດ້ວຍສາຍຕາວ່າເຂົາ ເປັນຜູ້ຫລ້າຫລັງລົ້ມເຫລວ ນັ້ນຈະຮູ້ສຶກໃນບໍ່ຊ້າວ່າ ເຂົາຄືຜູ້ຫລ້າຫລັງທີ່ແທ້ຈິງ. ພວກເຂົາອາດຈະ ກາຍເປັນຄົນບໍ່ສົນໃຈຫຍັງໃນໂຮງຮຽນ ຍ້ອນວ່າເຮັດຫຍັງຮຽນຫຍັງກໍບໍ່ເຄີຍໄດ້ຮັບການຍ້ອງຍໍຊົມ ເຊີຍຈັກເທື່ອ. ພວກເຂົາຈະເລີ່ມເຊື່ອ ແລະ ຄິດວ່າເຂົາບໍ່ມີຄວາມສາມາດ ທີ່ຈະເຮັດຫຍັງໄດ້ດີ ຂຶ້ນກວ່ານີ້, ເມື່ອເປັນແນວນັ້ນ, ພວກເຂົາອາດຈະອອກໂຮງຮຽນ ແລະ ໄປຫາລາຍໄດ້ຊ່ວຍ ຄອບຄົວກໍເປັນໄດ້.

ໃຫ້ກຽມວັດສະດຸປະກອບເພື່ອໃຫ້ຄວາມສະດວກໃນການເຮັດວຽກເປັນກຸ່ມ. ທ່ານຄວນຈື່ໄວ້ວ່າ ເກມຕ່າງໆ, ບັດຄຳ/ບັດງານ ແລະ ວັດຖຸປະກອບອື່ນໆ ເຖິງວ່າຈະໃຊ້ ເວລາ ເພື່ອຜະລິດ ແລະ ສາມາດ ໃຊ້ແລ້ວໃຊ້ອີກໄດ້ຫລາຍຄັ້ງ ມັນສາມາດທີ່ຈະແລກປ່ຽນ ຫລື ລຽນ ແບບກັນໄດ້ໃນລະຫວ່າງ ການປະຊຸມກຸ່ມໂຮງຮຽນ. ຢ່າລືມວ່າເດັກນັກຮຽນ ຂອງທ່ານສາມາດ ທີ່ຈະຊ່ວຍທ່ານຜະລິດວັດຖຸອຸປະກອນ ເຫລົ່ານີ້ ໄດ້ເຊິ່ງຈະຊ່ວຍ ຫລຸດຜ່ອນວຽກໜັກຂອງທ່ານລົງ ໃນຂະນະທີ່ທ່ານກໍໃຫ້ໂອກາດຮຽນຮູ້ທີ່ມີຄຸນຄ່າ ແລະ ຄວາມພາກພູມໃຈໃນຕົນເອງຫລາຍຂຶ້ນ ແກ່ເຂົາດ້ວຍ.

ໃຫ້ຄຳນຶງເຖິງພື້ນທີ່ຫ້ອງຮຽນຂອງທ່ານ. ເຄື່ອງຕົບແຕ່ງ ໂຕະຕັ່ງຄວນຈະຖືກຈັດກຽມໄດ້ ຢ່າງວ່ອງໄວ ແລະ ງ່າຍດາຍຄືແນວໃດຈຶ່ງດີທີ່ສຸດເພື່ອການເຮັດວຽກເປັນກຸ່ມທີ່ມີປະສິດທິຜົນ? ເດັກຈະຮຽນຮູ້ເພື່ອຈັດຕັ້ງ ແລະ ຈັດຕັ້ງຫ້ອງຮຽນຄືນໃໝ່ໂດຍຂຶ້ນກັບ ກິດຈະກຳທີ່ຈະເຮັດ. ໃຫ້ເຮັດ ວຽກຮ່ວມກັບພວກເຂົາ ເພື່ອຕັດສິນໃຈວ່າຈະຈັດກຽມຫ້ອງຮຽນ ຄືແນວໃດ ຈຶ່ງຈະດີທີ່ສຸດ ສຳລັບ ທຸກຄົນ.

ຕ້ອງໃຫ້ແນ່ໃຈວ່າກິດຈະວັດຕ່າງໆໄດ້ຖືກຈັດສ້າງຂຶ້ນຢ່າງໝັ້ນຄົງແລ້ວ. ເດັກຕ້ອງມີຄວາມເຂົ້າ ໃຈທີ່ຊັດເຈນກ່ຽວກັບວິທີທີ່ຈະຍ້າຍເຂົ້າໄປຢູ່ໃນກຸ່ມ, ເລີ່ມຕົ້ນຈັ່ງໃດ, ຫລັງ ຈາກສິ້ນສຸດກິດຈະກຳກຸ່ມແລ້ວ ຄວນເຮັດຫຍັງ ແລະ ອື່ນໆ. ໃຫ້ທ່ານພັດທະນາກິດຈະວັດຕັ້ງ ແຕ່ຕົ້ນເທົ່າທີ່ເປັນ ໄປໄດ້.

ເດັກທຸກຄົນຄວນໄດ້ຮັບໜ້າທີ່ຮັບຜິດຊອບໃນການນຳພາກຸ່ມ. ຫົວໜ້າກຸ່ມມີພາລະບົດ ບາດສຳຄັນທີ່ຕ້ອງເຮັດໃນການຊ່ວຍເຫລືອຄູ ເຊັ່ນ ການສົ່ງຕໍ່ຄຳສັ່ງ ຂໍ້ແນະນຳ, ແຈກຢາຍ ອຸປະກອນ/ ເອກະສານ, ນຳພາກຸ່ມປະຕິບັດກິດຈະກຳ ແລະ ລາຍງານຄືນຕໍ່ຄູ.

ໃນບາງໂຮງຮຽນ. ເຈ້ຍແຜ່ນໃຫຍ່ທີ່ໃຊ້ເພື່ອຕິດຕາມຄວາມກ້າວໜ້າໄດ້ຖືກຕິດໄວ້ທີ່ຝາ. ເດັກຈະ ເຊັນຊື່ໃສ່ເມື່ອພວກເຂົາເຮັດກິດຈະກຳສຳເລັດແລ້ວ, ສ່ວນຄູຈະໃສ່ຄະແນນໃຫ້ຕາມທີຫລັງ. ການ ປະຕິບັດສິ່ງ ດັ່ງກ່າວ ແມ່ນເພື່ອປ້ອງກັນບໍ່ໃຫ້ເດັກເຂົ້າຄິວຕໍ່ໜ້າໂຕະຄູ ເພື່ອລໍຖ້າຄູໃຫ້ຄະແນນ.

5.3 ການຮຽນຮູ້ແບບຮ່ວມມືກັນ

ການຮຽນຮູ້ແບບຮ່ວມມືກັນເກີດຂຶ້ນ ເມື່ອເດັກນັກຮຽນແບ່ງຄວາມຮັບຜິດຊອບ ແລະ ຊັບ ພະຍາກອນຮ່ວມກັນ ລວມທັງ ເມື່ອພວກເຂົາເຮັດວຽກເພື່ອບັນລຸເປົ້າຫມາຍອັນດຽວກັນ. ການພັດ ທະນາທັກສະການເຮັດວຽກເປັນກຸ່ມຮ່ວມມືຈະກ່ຽວຂ້ອງກັບເວລາ, ການເຝິກປະຕິບັດ ແລະ ຍູ້ ໜູນພຶດຕິກຳຕ່າງໆ ທີ່ເຫມາະສົມ. ຄູມີພາລະບົດບາດທີ່ສຳຄັນໃນການສ້າງຕັ້ງສະພາບແວດລ້ອມ ແຫ່ງການສະໜັບສະໜູນ ເຊິ່ງເດັກຮູ້ສຶກໄດ້ວ່າ ເຂົາສາມາດທີ່ຈະສ່ຽງໄພ ແລະ ເປັນສະພາບແວດ ລ້ອມທີ່ຄຳຄິດເຫັນຂອງເດັກ ທຸກຄົນໄດ້ຮັບຮອງວ່າມີຄຸນຄ່າ.

ການເຮັດວຽກເປັນກຸ່ມຮ່ວມມືກັນ ສາມາດທີ່ຈະຊ່ວຍຜູ້ຮຽນທັງໝົດໄດ້ ໂດຍການເພີ່ມ ທະວີຄວາມເຂົ້າໃຈ ແລະ ການສົ່ງເສີມຄວາມສະໜຸກສະໜານຂອງເຂົາ ແລະ ທັດສະນະຄະຕິ ທີ່ຖືກຕ້ອງຕໍ່ໆກັນ ແລະ ກ່ຽວກັບຕົວພວກເຂົາເອງ. ແຕ່ວ່າ, ເພື່ອຈະເຮັດໃຫ້ເດັກ**ທຸກຄົນ** ໄດ້ຮັບ ປະໂຫຍດຈາກກິດຈະກຳກຸ່ມຮ່ວມມືນັ້ນ, ພວກເຂົາຈະຕ້ອງການ ໂອກາດໃນການພັດທະນາທັກ ສະ ແລະ ພາລະບົດບາດຕ່າງໆ. ຍົກຕົວຢ່າງ: ເດັກຍິງຫລາຍຄົນອາດຈະຕ້ອງການປະສົບການ ໃນການເປັນ ຜູ້ນຳສະເໜີ ແລະ ເດັກຊາຍຫລາຍຄົນອາດຈະຕ້ອງການປະສົບການ ໃນການ ຈົດບັນທຶກ. **ເດັກທຸກຄົນ**ຈຳເປັນຕ້ອງ ພັດທະນາທັກສະໃນການເວົ້າທີ່ຖືກຕ້ອງ ແລະ ທັກສະໃນ ການຟັງແບບຕັ້ງໜ້າ.

ເດັກບາງຄົນອາດບໍ່ທັນໄດ້ຮຽນຮູ້ເພື່ອຕີລາຄາ/ໃຫ້ຄຸນຄ່າແນວຄວາມຄິດຂອງຄົນອື່ນ.ສິ່ງ ນີ້ສາມາດເຫັນໄດ້ຢ່າງຈະແຈ້ງ ໂດຍສະເພາະເມື່ອເດັກເຮັດວຽກໃນກຸ່ມແບບປະສົມ. ເດັກຍິງສ່ວນ ໃຫຍ່ ມັກຈະຍອມຮັບແນວຄວາມຄິດຂອງເດັກຊາຍ ເພື່ອຫລີກລ້ຽງຄວາມຂັດແຍ່ງ. ເດັກຊາຍ ຫລາຍຄົນຂ້ອນຂ້າງຈະມີແນວໂນ້ມບໍ່ສົນໃຈ ຫລື ເຍາະເຍີ້ຍແນວຄວາມຄິດຂອງເດັກຍິງ. ສະຖາ ນະການແບບດຽວ ກັນນີ້ ກໍສາມາດທີ່ຈະເກີດຂຶ້ນໃນໝູ່ເດັກທີ່ມາຈາກກຸ່ມຊົນເຜົ່າ ຫລື ກຸ່ມທີ່ບໍ່ສາ ມາດ ເວົ້າພາສາທີ່ສອນ ໃນໂຮງຮຽນໄດ້ດີ. ພວກເຂົາມີແນວໂນ້ມທີ່ຈະຕາມເດັກກຸ່ມໃຫຍ່.

ຖ້າເດັກບາງຄົນຄອບງຳການໃຊ້ເວລາສົນທະນາຢ່າງຕໍ່ເນື່ອງ, ເດັກຜູ້ອື່ນໆ ກໍຈະຫມົດ ໂອກາດທີ່ຈະສະແດງອອກແນວຄວາມຄິດ ແລະ ອະທິບາຍຄຳຄິດເຫັນຂອງຕົນ. ເດັກທີ່ມີພື້ນ ຖານ ແລະ ຄວາມສາມາດທີ່ແຕກຕ່າງກັນຈະສາມາດກາຍເປັນຜູ້ມີຄວາມໝັ້ນໃຈ ໃນການຢືນຢັນ ອ້າງເຫດຜົນແນວຄວາມຄິດຂອງຕົນໄດ້ຢ່າງໃດ? ຢູ່ໃນບາງກໍລະນີ, ອາດມີຄວາມຈຳເປັນ ທີ່ຕ້ອງ ມີກຸ່ມທີ່ມີລັກສະນະຄ້າຍຄືກັນກ່ອນ (ເຊັ່ນ ກຸ່ມເດັກເພດດຽວກັນ) ເພື່ອວ່າທັກສະ ແລະ ຄວາມ ໝັ້ນໃຈຈະໄດ້ຮັບການພັດທະນາ. ຫລັງຈາກນັ້ນ, ກຸ່ມດັ່ງກ່າວຈຶ່ງຈັດເຂົ້າເປັນກຸ່ມປະສົມຕາມ ທີຫລັງ ໃນເມື່ອເດັກໄດ້ພັດທະນາທັກສະການສື່ສານ ແລະ ທັກສະການພົວພັນລະຫວ່າງບຸກ ຄົນແລ້ວ.

ໃນບາງວັດທະນະທຳ ຫລື ບາງປະເທດ ປະຊາຊົນເຊື່ອກັນວ່າ ການຮຽນຮູ້ທີ່ແທ້ຈິງ ມາ ຈາກຄູສອນເທົ່ານັ້ນ. ດັ່ງນັ້ນ, ພວກເຂົາຈຶ່ງບໍ່ເຫັນຄຸນຄ່າ ຫລື ປະໂຫຍດຈາກການຮຽນຮູ້/ ເຮັດວຽກ ໃນກຸ່ມຮ່ວມມື. ໃນຂະນະທີ່ຄວາມເຊື່ອນີ້ຄວນຈະຖືກຮັບຮູ້ນັ້ນ, ທັກສະຕ່າງໆ ທີ່ ເດັກໄດ້ຮັບການ ພັດທະນາ ໂດຍຜ່ານການຮຽນຮູ້ແບບຮ່ວມມື ຈະເປັນປະໂຫຍດຕໍ່ພວກເຂົາ ບໍ່ວ່າພື້ນຖານຂອງ ເຂົາຈະແຕກຕ່າງກັນກໍຕາມ. ສິ່ງສຳຄັນ ຕ້ອງບອກໃຫ້ພໍ່ແມ່ຜູ້ປົກຄອງຮັບຊາບ ກ່ຽວກັບ ການປ່ຽນ ແປງວິທີສິດສອນ ແລະ ຮຽນຮູ້. ພວກເຂົາຍັງອາດສາມາດທີ່ ຈະຊ່ວຍຜະລິດອຸປະກອນປະຈັກຕາ ຫລື ເກມຕ່າງໆເປັນຕົ້ນ ເພື່ອວ່າເຂົາຈະເຂົ້າໃຈສິ່ງທີ່ ຄູພວມພະຍາຍາມຈະເຮັດ.

ທັກສະການຮ່ວມມືສາມາດພັດທະນາໄດ້ຢ່າງມີປະສິດທິຜົນທີ່ສຸດພາຍໃນສະພາບເງື່ອນ ໄຂທີ່ມີຄວາມຫມາຍສຳຄັນ. ກິດຈະກຳຕ່າງໆທີ່ມີລັກສະນະປາຍເປີດ ແລະ ຕ້ອງການ ການຄົ້ນ ຄິດທີ່ແຕກຕ່າງຫລາກຫລາຍ (ເຊັ່ນ ກິດຈະກຳແກ້ບັນຫາ) ຈະມີຄວາມເຫມາະສົມເປັນພິເສດ ສຳລັບ ການພັດທະນາທັກສະກຸ່ມຮ່ວມມື.

5.4 ທັກສະການພົວພັນລະຫວ່າງບຸກຄົນເພື່ອການຮຽນຮູ້

ການສ້າງເຈຕະນາລົມ ຫລື ຈິດວິນຍານຂອງກຸ່ມ ຈະນຳພາໄປສູ່ຄວາມສຳເລັດຂອງ ທັງຫມົດຫ້ອງຮຽນ. ການແຂ່ງຂັນຕ່າງໆທີ່ແບ່ງແຍກເດັກຍິງອອກຈາກເດັກຊາຍ, ແບ່ງແຍກເດັກທີ່ ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນອອກ ຫລື ສິ່ງເສີມລະບົບນິຍົມຄວາມລຳອຽງ ຈະຂັດຂວາງການຮຽນຂອງ**ເດັກທັງຫມົດ.** ໃນຖານະທີ່ເປັນຄູ, ທ່ານສາມາດທີ່ຈະຊ່ອຍເດັກຄົ້ນ ຄິດເຖິງຕົວເຂົາເອງ ໃນຖານະເປັນ**ທີມແຫ່ງການຮຽນຮູ້** ຫລື **ເປັນຊຸມຊົນແຫ່ງການຮຽນຮູ້** ເຊິ່ງ ຄວາມສຳເລັດຂອງເດັກຄົນໜຶ່ງໃນກຸ່ມ ຈະຊ່ອຍທຸກຄົນໃຫ້ປະສົບຜົນສຳເລັດດ້ວຍ.

ການສື່ສານທີ່ມີປະສິດທິຜົນຈະກ່ຽວຂ້ອງກັບການຟັງ, ການເວົ້າ ແລະ ການປ່ຽນຝຽນກັນ. ສິ່ງເຫຼົ່ານີ້ ແມ່ນທັກສະຕ່າງໆທີ່ຈຳເປັນສຳລັບກຸ່ມຮ່ວມມື ແລະ ເປັນທັກສະ ສຳລັບການເປັນ ພົນລະເມືອງທີ່ມີປະຊາທິປະໄຕ. ຄູທີ່ດີຈະບໍລິຫານຈັດການການສື່ສານ ເພື່ອໃຫ້ແນ່ໃຈວ່າບໍ່ມີ ເດັກຄົນໃດ ຫລື ກຸ່ມ ຍ່ອຍໃດຂອງເດັກຕອບທຸກໆຄຳຖາມ ຫລື ຄອບງຳການສົນທະນາ.

ການຟັງແບບຕັ້ງໜ້າ ເຊິ່ງເດັກມີຄວາມຮັບຜິດຊອບຕໍ່ການໄດ້ຍິນ ແລະ ເຂົ້າໃຈສິ່ງທີ່ແຕ່ ລະຄົນ ເວົ້າແມ່ນພາກສ່ວນໜຶ່ງທີ່ສຳຄັນຍິ່ງ ຂອງສະພາບແວດລ້ອມຂອງການຮຽນຮູ້. ການເວົ້າທີ່ ຈະແຈ້ງກໍມີຄວາມສຳຄັນເທົ່າທຽມກັນ ລວມທັງການກ່າວຄວາມຄິດເຫັນ ແລະ ຄວາມຮູ້ສຶກ ໂດຍ ບໍ່ແຕະຕ້ອງສິດທິຂອງຄົນອື່ນ. ການຍອມຮັບ ແລະ ການໃຊ້ພາສາທ້ອງຖິ່ນໃນຫ້ອງຮຽນກໍຈະ ຊ່ອຍເດັກທຸກຄົນໃຫ້ເຂົ້າມີສ່ວນຮ່ວມ.

ໂດຍສະຫຼຸບແລ້ວ:

- ການຮ່ວມມືກັນ ຈະເຮັດໃຫ້ຜູ້ຮຽນສາມາດເຮັດວຽກຮ່ວມກັນ ລວມທັງການແບ່ງປັນ ຄວາມຮັບຜິດຊອບ, ວັດຖຸປະກອນ/ເອກະສານ, ພາລະບົດບາດ ແລະ ໂອກາດຕ່າງໆ ໃນການ ຮຽນຮູ້.
- ບັນດາກຸ່ມຍ່ອຍຂອງເດັກ ກໍສາມາດແບ່ງພາລະບົດບາດ ແລະ ແບ່ງຄວາມຮັບຜິດ ຊອບ. ຢູ່ໃນກິດຈະກຳວິຊາວິທະຍາສາດ, ເດັກຜູ້ໜຶ່ງອາດຈະຊັ່ງນ້ຳໜັກວັດຖຸຕ່າງໆ, ອີກຄົນໜຶ່ງ ອາດຈະເປັນຄົນບັນທຶກຜົນ. ເມື່ອຮອດເຄິ່ງທາງຂອງການປະຕິບັດກິດ ຈະກຳ, ເດັກອາດຈະປ່ຽນພາລະໜ້າທີ່ກັນ. ການຮ່ວມມືຈະຕ້ອງໄດ້ຮັບການເຝິກ ປະຕິບັດຖ້າກຸ່ມຕ່າງໆ ຂອງເດັກ ຕ້ອງເຮັດວຽກຢ່າງເປັນເອກະລາດ.
- ການແກ້ບັນຫາ ແລະ ການເຈລະຈາຈະຊ່ອຍຜູ້ຮຽນຮູ້ແກ້ໄຂຂໍ້ຂັດແຍ່ງ ແລະ ເຮັດ ການຕັດສິນໃຈ. ເດັກຕ້ອງຮຽນຮູ້ ແລະ ເຝິກປະຕິບັດທັກສະການຈັດການກັບຂໍ້ຂັດ ແຍ່ງທີ່ອີງໃສ່ ພື້ນຖານຂອງທັກສະການສື່ສານທີ່ດີ ແລະ ທັດສະນະຄະຕິອົດທົນ.
- ເພື່ອຈະຮຽນຮູ້ວິທີຄົ້ນຄິດ, ເດັກຈຳເປັນຕ້ອງໄດ້ຮັບການຊຸກຍູ້ໃຫ້ຕົກລົງກັນເລື່ອງເປົ້າ ຫມາຍປະເມີນຫາທາງເລືອກປະຕິບັດ, ເຮັດການຕັດສິນໃຈ ແລະ ໃຫ້ສະໜັບສະ ໜູນເຂົາ ແລະ ຕິດຕາມຕະຫລອດ ເພື່ອຮຽນຮູ້ຜົນຮັບຂອງການຄັດເລືອກຂອງເຂົາ.

ທຸກໆຂະບວນການ ເຫລົ່ານີ້ ແມ່ນຂຶ້ນກັບເຈຕະນາລົມ/ ຈິດວິນຍານຂອງກຸ່ມ, ການ ສື່ສານ ແລະ ການຮ່ວມມື.

5.5 ການສ້າງຕັ້ງລະບຽບການພື້ນຖານໃນການເຮັດວຽກເປັນກຸ່ມ

ຄູ່ມືສຳລັບການເຂົ້າມີສ່ວນຮ່ວມ ຫລື "ລະບຽບການພື້ນຖານ" ສາມາດຊ່ວຍທ່ານຈັດຕັ້ງ ຊົ່ວໂມງສົນທະນາກັບເດັກນັກຮຽນຂອງທ່ານ. ຄູ່ມື ຫລື ລະບຽບປະຕິບັດ ເຫລົ່ານີ້ຈະສະໜອງ ພື້ນຖານ ໃນການສົນທະນາແບບເປີດເຜີຍ ແລະ ເຄົາລົບນັບຖືກັນ ແລະ ຈະເຮັດໃຫ້**ເດັກທຸກຄົນ** ເຂົ້າຮ່ວມ. ວິທີທີ່ດີທີ່ສຸດ ເພື່ອສ້າງລະບຽບການພື້ນຖານ ແມ່ນຕ້ອງອະນຸຍາດ ໃຫ້ເດັກສ້າງບັນຊີ ລາຍການອອກມາຄື:

1. ຮັບຟັງຢ່າງຕັ້ງໜ້າ, ເຄົາລົບນັບຖືຜູ້ອື່ນ ເມື່ອເຂົາພວມເວົ້າຢູ່, ແຕ່ຕ້ອງມີສ່ວນຮ່ວມຢ່າງ ເຕັມທີ່.
2. ເວົ້າຈາກປະສົບການຂອງຕົວເອງ ("ຂ້ອຍ" ແທນທີ່ຈະເວົ້າວ່າ "ເຂົາ").
3. ຫ້າມເຮັດການໂຈມຕີບຸກຄົນ; ເລັ່ງເປົ້າໃສ່ແນວຄວາມຄິດ ບໍ່ແມ່ນຈະເລັ່ງເປົ້າໃສ່ ບຸກຄົນ.

ສິ່ງສຳຄັນອີກຢ່າງໜຶ່ງແມ່ນການສ້າງຕັ້ງລະບຽບການພື້ນຖານສຳລັບວິທີບໍລິຫານຈັດການ ການເຂົ້າມີສ່ວນຮ່ວມ. ຍົກຕົວຢ່າງ: ເພື່ອເຮັດໃຫ້ແຕ່ລະຄົນມີໂອກາດ ທີ່ຈະເວົ້າ, ກຸ່ມອາດສາ ມາດໃຊ້ "ໄມ ໂຄຣໂຟນມະຫັດສະຈັນ". ວິທີນີ້ ສາມາດໃຊ້ກາບຫອຍ ຫລື ກ້ອນຫີນຜ່ານອ້ອມໄປ, ເມື່ອໃຜຜູ້ໜຶ່ງໄດ້ຮັບກາບຫອຍ ກໍຖືວ່າ ແມ່ນທີຂອງຜູ້ນັ້ນເວົ້າ ຖ້າຕ້ອງການຈະເວົ້າ. ຖ້າເຂົາຢາກ "ສິ່ງຜ່ານ" ເຂົາກໍສິ່ງຜ່ານກາບຫອຍໄປໃຫ້ຄົນຕໍ່ໄປ. ສິ່ງນີ້ສາມາດຈະຫລຸດຜ່ອນ ການຄອບງຳ ໂດຍຄົນໜຶ່ງ ຫລື ສອງຄົນທີ່ມີ ຄວາມໝັ້ນໃຈ ແລະ ເວົ້າເກັ່ງກວ່າຄົນໃນກຸ່ມ.

ໃຫ້ກວດເບິ່ງຄືນລະບຽບການພື້ນຖານເປັນບາງໂອກາດ ແລະ ຖ້າມີເວລາພຽງພໍ ກໍໃຫ້ ຖາມເດັກວ່າ ເຂົາຕ້ອງການເພີ່ມເຕີມຫຍັງອີກ ຫລືບໍ່ ໃສ່ລະບຽບການໃໝ່ ຫລື ປ່ຽນແປງອັນເກົ່າ.

ກິດຈະກຳເພື່ອປະຕິບັດ: ການປະເມີນທັກສະການພົວພັນລະຫວ່າງບຸກຄົນ

ການສັງເກດ ແມ່ນທັກສະໜຶ່ງທີ່ສຳຄັນ ສຳລັບການປະເມີນທັກສະການພົວພັນລະຫວ່າງ ບຸກຄົນ. ໃຫ້ພະຍາຍາມວິເຄາະວິທີເຮັດວຽກຂອງກຸ່ມສະເພາະໃດໜຶ່ງ.

ທັກສະຕ່າງໆ	ເດັກຊື່ ກ.	ເດັກຊື່ ຂ.	ເດັກຊື່ ຄ.
ຕັ້ງໃຈຟັງດີ			
ສະແດງອອກໄດ້ດີ			
ເຮັດບົດບາດເປັນຜູ້ນຳ			
ຊ່ວຍເຫລືອຜູ້ອື່ນ			

ອີງໃສ່ການສັງເກດຂອງທ່ານ, ທ່ານສາມາດທີ່ຈະສະໜອງກິດຈະກຳເພີ່ມຕື່ມ ສຳລັບເດັກ ບາງຄົນ ເພື່ອພັດທະນາທັກສະ ສະເພາະໃດໜຶ່ງທີ່ຈຳເປັນສຳລັບກຸ່ມ.

5.6 ການຈັດການຮຽນຮູ້ແບບເພື່ອນຊ່ວຍເພື່ອນ

ການຮຽນແບບເພື່ອນສອນເພື່ອນ ການຮຽນແບບເພື່ອນສອນເພື່ອນ ກໍເປັນສິ່ງທີ່ຮູ້ກັນ ເຊິ່ງ ມັນເປັນການສິດສອນ ລະຫວ່າງ ເພື່ອນດ້ວຍກັນ ແລະ ການຮຽນຮູ້ແບບເດັກເພື່ອເດັກ. ໂດຍປົກ ກະຕິມັກຈະເກີດຂຶ້ນ ເມື່ອເດັກທີ່ມີຄວາມສາມາດຫລາຍກວ່າ ຫລື ຂັ້ນຮຽນທີ່ສູງກວ່າສຳເລັດວຽກ ຂອງເຂົາແລ້ວຈຶ່ງຊ່ວຍຜູ້ທີ່ອ່ອນກວ່າ ຫລື ຜູ້ຮຽນຜູ້ອື່ນໆ. ໂດຍໃຊ້ຫລາຍທາງເລືອກ, ເຊິ່ງອາດ ຈັດຕັ້ງເວລາພິເສດ ໃນແຕ່ລະວັນສຳລັບເດັກ ເພື່ອຊ່ວຍເຫລືອກັນຮຽນຮູ້ຄະນິດສາດ ຫລື ພາສາ, ຈະເປັນຕົວຕໍ່ຕົວ ຫລື ໃນກຸ່ມຍ່ອຍກໍໄດ້.

ການສອນແບບເພື່ອນສອນ ເພື່ອນເປັນເຕັກນິກການສອນທີ່ມີຄຸນຄ່າສູງ ຍ້ອນວ່າມັນຈະ ຊ່ວຍຕອບສະໜອງຄວາມຕ້ອງການແບບລາຍບຸກຄົນຂອງເດັກ. ນອກນີ້ມັນຍັງຊ່ວຍສົ່ງເສີມວິທີ ການຮຽນຮູ້ແບບຮ່ວມມື ແທນທີ່ຈະເປັນການຮຽນຮູ້ແບບແຂ່ງຂັນຫລາຍກວ່າ. ຄວາມນັບຖື ແລະ ຄວາມເຂົ້າໃຈກັນຈະຖືກສ້າງຂຶ້ນ ໃນລະຫວ່າງທີ່ເດັກພວມເຮັດວຽກຮ່ວມກັນ. ເດັກ "ຜູ້ສອນ" ຈະມີຄວາມທະນົງໃຈໃນການສອນ, ໃນຂະນະດຽວກັນ ເດັກຜູ້ນັ້ນກໍໄດ້ຮຽນຮູ້ປະສົບການ. ນອກນີ້ ມັນຍັງຊ່ວຍເຮັດໃຫ້ຄວາມຮູ້ທີ່ເຂົາໄດ້ຮຽນມາໜັກແໜ້ນຂຶ້ນ ແລະ ເຂົາຍັງໄດ້ປະໂຫຍດອັນໃຫຍ່ ຫລວງ ຈາກການທີ່ໄດ້ຮັບມອບໝາຍຄວາມຮັບຜິດຊອບໃນຫ້ອງຮຽນ. ໃນເວລາພວກເຂົາໄດ້ ຮຽນຮູ້ກັບ "ຄູທີ່ເປັນໝູ່ເພື່ອນກັນ", ຜູ້ຮຽນຍັງຈະພັດທະນາຄວາມສາມາດໃນການຟັງ, ມີສະມາທິ ແລະ ເຂົ້າໃຈໄດ້ດີຕໍ່ສິ່ງທີ່ພວມຮຽນຮູ້ ໃນລັກສະນະທີ່ມີຄວາມໝາຍສຳຄັນ. ຄຳອະທິບາຍຂອງ ເດັກຕໍ່ເດັກ ບາງຄັ້ງກໍສາມາດທີ່ຈະບັນລຸສິ່ງທີ່ຄູບໍ່ສາມາດອະທິບາຍໄດ້ດີມາກ່ອນ. ເດັກນັກຮຽນ ຈະເບິ່ງບັນຫາຕ່າງໆ ໃນທິດທາງທີ່ແຕກຕ່າງກັນຫລາຍກວ່າຜູ້ໃຫຍ່ ແລະ ພວກເຂົານຳໃຊ້ພາສາ ທີ່ມີລັກສະນະເປັນເພື່ອນມິດ ໃນການຮຽນຮູ້ຫລາຍກວ່າ.

ການສອນເພື່ອນດ້ວຍກັນໃນການອ່ານ

ໃນການອ່ານ, ການສອນເພື່ອນດ້ວຍກັນມັກຈະຖືກນຳໃຊ້ ເພື່ອຊ່ວຍຜູ້ທີ່ອ່ານຊ້າກວ່າໝູ່ ຫລື ເພື່ອສະໜອງການອ່ານເພີ່ມເຕີມ ສຳລັບ ເດັກທຸກຄົນທີ່ຍັງອ່ອນກວ່າໝູ່ໃນຫ້ອງ.

- ມັນສາມາດທີ່ຈະມີຜົນກະທົບທີ່ດີ ທາງດ້ານການສຶກສາກໍຄືດ້ານສັງຄົມຕໍ່ຄູ ຕໍ່ເດັກ ຫລື ຜູ້ສອນ ທີ່ເປັນເດັກ ແລະ ເດັກຜູ້ທີ່ຮຽນນຳໝູ່;
- ມັນສາມາດເປັນແນວທາງປະຕິບັດທີ່ດີເລີດໃນການນຳເອົາຄວາມຊ່ວຍເຫລືອເປັນ ລາຍບຸກຄົນເຂົ້າໃນການອ່ານ
- ນອກນີ້, ກໍມີບາງຄັ້ງ, ທີ່ສ້າງຄວາມແປກໃຈ ເມື່ອເຫັນລະດັບຄວາມສາມາດ ໃນການ ອ່ານຂອງຜູ້ສອນສ່ວນຫລາຍກໍດີຂຶ້ນດ້ວຍ!

- ♦ ເມື່ອນຳໃຊ້ເຕັກນິກນີ້, ຈຳນວນເວລາຄວາມຫ້າວຫັນ ໃນການເຂົ້າມີສ່ວນຮ່ວມຂອງ ເດັກທີ່ອ່ອນກວ່າຈະເພີ່ມຂຶ້ນ. ເດັກທີ່ດ້ອຍກວ່າຈະໄດ້ຮັບຜົນປະໂຫຍດຢ່າງຫຼວງ ຫຼາຍຈາກຄວາມເອົາໃຈໃສ່ທີ່ເປັນໜຶ່ງດຽວຈາກຜູ້ອື່ນ. ຄູສ່ວນໃຫຍ່ຈະບໍ່ມີເວລາພຽງ ພໍ ເພື່ອໃຫ້ການຊ່ວຍ ເຫລືອແກ່ເດັກເປັນລາຍບຸກຄົນ ຄືລັກສະນະນີ້.

ເຖິງຢ່າງໃດກໍຕາມ, ຍັງມີຄວາມຈຳເປັນທີ່ຕ້ອງອະທິບາຍຢ່າງລະອຽດແກ່ຄູເດັກວ່າ ທ່ານ ຕ້ອງການໃຫ້ພວກເຂົາເຮັດຫຍັງຢ່າງຈະແຈ້ງ. ຄູເດັກຕ້ອງເຂົ້າໃຈແຈ່ມແຈ້ງວ່າ ທ່ານຄາດຫວັງອັນ ໃດແດ່ ຈາກການຊ່ວຍເຫລືອຂອງເຂົາ. ຄູເດັກຄວນເຮັດວຽກກັບຜູ້ທີ່ອ່ອນກວ່າຢ່າງງຽບໆ, ເປັນ ເພື່ອນມິດ ແລະ ຊ່ວຍເຫຼືອ. ຄວນຫຼີກລ້ຽງຄວາມຫຍຸ້ງຍາກທາງດ້ານຈິດໃຈ. ໃນທີ່ນີ້ ຈະສະເໜີບາງຕົວ ຢ່າງຂອງເຕັກນິກການ ສອນເພື່ອນໃນການອ່ານ.

ເຕັກນິກການອ່ານແບບຈັບຄູ່. ເຕັກນິກນີ້ຕັ້ງຢູ່ບົນພື້ນຖານການອ່ານເຊິ່ງ:

ກ. ສັບປ່ຽນການອ່ານລະຫວ່າງການອ່ານພ້ອມກັນດັງໆແລະຜູ້ອື່ນຕິດຕາມຊ່ວຍເຫລືອ.

ຂ. ນຳໃຊ້ການຕິຊົມທີ່ເປັນທາງບວກເພື່ອສົ່ງເສີມໃຫ້ອ່ານຖືກຕ້ອງ ແລະເປັນອິດສະຫລະ.

ເດັກຜູ້ສອນເພື່ອນຕ້ອງໄດ້ຮັບການເຝິກອົບຮົມເພື່ອ :

- ♦ ແນະນຳປຶ້ມອ່ານໃນລັກສະນະທີ່ມີການກະຕຸ້ນໃຫ້ອ່ານ
- ♦ ຍືດຫລີ່ລໍເວລາໃນການແກ້ຄຳຜິດຈົນກວ່າຜູ້ອ່ານໄດ້ພະຍາຍາມແກ້ໄຂ ດ້ວຍຕົນເອງແລ້ວ
- ♦ ສົນທະນາອະພິປາຍໄປແຕ່ລະຕອນຫລັງຈາກອ່ານແລ້ວ;
- ♦ ກວດກາຄືນການປະຕິບັດໜ້າທີ່ການເປັນຄູຂອງຕົນ ແລະ ກວດເບິ່ງຄືນຄວາມກ້າວ ໜ້າຂອງຜູ້ຮຽນໂດຍຕື່ມຂໍ້ຄວາມໃສ່ໃບລາຍງານ ແລະ ບັນທຶກກວດກາ.

ວິທີການແບບນີ້ ແມ່ນປະຕິບັດຕາມແນວຄວາມຄິດຂອງການອ່ານຮ່ວມກັນ ເຊິ່ງເປັນທີ່ນິຍົມກັນ ໃນໂຮງຮຽນເຂດໝູ່ເກາະປາຊີຟິກ ໂດຍການແນະນຳຄວາມຄິດລິເລີ່ມໃໝ່ດັ່ງເຊັ່ນ “ກຽມພ້ອມ ເພື່ອຈະອ່ານ”. ປະສົບການ ໃນການໃຊ້ປຶ້ມອ່ານຮ່ວມກັນ ມັກຈະກ່ຽວພັນເຖິງປຶ້ມເຫຼັ້ມໃຫຍ່ຫຼາຍຫົວ ທີ່ໃຫ່ຍພໍ ສຳລັບທັງໝົດຫ້ອງຮຽນທີ່ຈະອ່ານກັບຄູ. ຄູໃນເຂດໝູ່ເກາະບາງຄົນໄດ້ເຂົ້າຮ່ວມການ ເຝິກອົບຮົມເຕັກນິກນີ້ ແລະ ໄດ້ຂຽນ ແລະ ສ້າງປຶ້ມອ່ານເຫຼັ້ມໃຫຍ່ເປັນຂອງຕົນເອງ.

5.7 ການຮຽນຮູ້ ດ້ວຍຕົນເອງ

ການຮຽນຮູ້ທີ່ຄວບຄຸມດ້ວຍຕົນເອງມີຄວາມສຳຄັນ ເພາະວ່າເດັກຈຳເປັນຕ້ອງຮຽນຢ່າງ ເປັນອິດສະຫລະຈາກຄູ. ສິ່ງດັ່ງກ່າວນີ້ ຈະເຮັດໃຫ້ທັງນັກຮຽນ ແລະ ຄູໃຊ້ເວລາທີ່ມີໃຫ້ເປັນປະ ໂຫຍດທີ່ສຸດ. ຂ້າງລຸ່ມນີ້ ຄືແນວຄວາມຄິດບາງຢ່າງ ເພື່ອທີ່ຈະຊ່ວຍທ່ານເພີ່ມທະວີການຮຽນຮູ້ ແບບອິດສະຫຼະໃນຫ້ອງຮຽນຂອງທ່ານ.

ທ່ານສາມາດທີ່ຈະບອກນັກຮຽນຂອງທ່ານຮຽນຮູ້ສ່ວນໃດໜຶ່ງຂອງບົດຮຽນຈາກປຶ້ມແບບຮຽນ ຫຼື ກະກຽມເພື່ອຮຽນບົດຮຽນໃໝ່.

- ພວກເຂົາສາມາດທີ່ຈະດຳເນີນການສຳຫຼວດເພື່ອວ່າເຂົາຈະມີຂໍ້ມູນເປັນຂອງຕົນເອງ ເພື່ອໃຊ້ໃນບົດຮຽນໃດໜຶ່ງ
- ທ່ານສາມາດໃຫ້ນັກຮຽນທ້ອງໃຫຍ່ ເຮັດການເຝິກປະຕິບັດ ເພື່ອພັດທະນາແນວຄວາມຄິດ ໃໝ່ ແລະ ນຳໃຊ້ເນື້ອໃນໃໝ່.
- ທ່ານສາມາດທີ່ຈະນຳໃຊ້ວິທີການແບບເດັກເພື່ອເດັກເພື່ອໃຫ້ເດັກວາງແຜນ ແລະ ປະຕິບັດການປັບປຸງສຸຂະອະນາໄມ ຫຼື ຂົງເຂດອື່ນໆ. ຈາກນັ້ນ, ທ່ານກໍສາມາດທີ່ຈະປະເມີນຜົນ ການປະຕິບັດ ຂອງພວກເຂົາ.

ຈຸດປະສົງຂອງການນຳໃຊ້ວິທີສິດສອນ ແລະ ການຈັດກຸ່ມແບບຕ່າງໆເຊັ່ນ ການສອນແບບເພື່ອນສອນເພື່ອນ ແລະ ການຮຽນຮູ້ທີ່ຄວບຄຸມດ້ວຍຕົນເອງ ແມ່ນເພື່ອປ່ຽນຈາກການສອນທີ່ຄວບຄຸມ ໂດຍຄູ (ຄູເປັນຈຸດສູນກາງ) ໄປສູ່ການສອນແບບຜູ້ຮຽນເປັນໃຈກາງ. ສິ່ງນີ້ ຈະສົ່ງເສີມການພັດທະນາເດັກໃຫ້ເປັນຜູ້ຮຽນອິດສະຫຼະ, ຄວບຄຸມດ້ວຍຕົນເອງ ແລະ ປົດປ່ອຍຄູໃຫ້ໄດ້ເອົາໃຈໃສ່ຕໍ່ຄວາມຕ້ອງ ການພິເສດເດັກເປັນລາຍບຸກຄົນ ແລະ ເປັນແຕ່ລະກຸ່ມ.

5.8 ການວາງແຜນການສອນສຳລັບຄວາມແຕກຕ່າງທີ່ຫລາກຫລາຍ

ເວົ້າແບບງ່າຍໆ, ຄວາມແຕກຕ່າງທີ່ຫລາກຫລາຍແມ່ນການເອົາໃຈໃສ່ຕໍ່ຄວາມຕ້ອງການ ການຮຽນຮູ້ຂອງເດັກລາຍບຸກຄົນ ຫຼື ຂອງກຸ່ມເດັກສະເພາະໃດໜຶ່ງ, ແທນທີ່ຈະແມ່ນການເອົາໃຈໃສ່ສອນໝົດຫ້ອງ ແບບວ່ານັກຮຽນມີຄວາມຄ້າຍຄືກັນໝົດ. ດັ່ງລຸ່ມນີ້ ຄື ບາງຫຼັກການພື້ນຖານທີ່ສະໜັບສະໜູນ ຄວາມແຕກຕ່າງທີ່ຫລາກຫລາຍ.

- **ຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍຕ້ອງມີລັກສະນະດັດສົມໄດ້.** ຄູ ແລະ ເດັກ ເຂົ້າໃຈວ່າອຸປະກອນຕ່າງໆ, ວິທີການຈັດກຸ່ມເດັກ, ວິທີການປະເມີນການຮຽນຮູ້ ແລະ ອົງປະກອບອື່ນໆຂອງຫ້ອງຮຽນ ລ້ວນແຕ່ເປັນເຄື່ອງມືທີ່ສາມາດນຳໃຊ້ໄດ້ໃນຫລາຍຮູບແບບ ເພື່ອສົ່ງເສີມຄວາມ ສຳເລັດຂອງເດັກເປັນລາຍບຸກຄົນ ແລະ ໝົດຫ້ອງຮຽນ.
- **ຄວາມຫຼາກຫຼາຍຂອງການສິດສອນຈະອອກມາຈາກ ການປະເມີນຄວາມຕ້ອງການຂອງຜູ້ຮຽນຢ່າງມີປະສິດທິຜົນ ແລະ ຕໍ່ເນື່ອງ.** ໃນຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍນັ້ນ, ຄວາມແຕກຕ່າງຫຼາກຫຼາຍຂອງເດັກຈະຖືກຕັ້ງຄວາມຄາດຫວັງໄວ້, ຖືກຊື່ນຊົມຍິນດີ ແລະ ຖືກບັນທຶກໄວ້ເພື່ອເປັນຂໍ້ມູນພື້ນຖານໃນການວາງແຜນການສອນບົດຮຽນຕ່າງໆ. ຫຼັກການ ດັ່ງກ່າວນີ້ ຍັງຊ່ອຍເຕືອນພວກເຮົາເຖິງການພົວພັນຢ່າງສະໜິດແໜ້ນ ທີ່ຄວນຈະມີລະຫວ່າງການປະເມີນ ແລະ ການສິດສອນ. ພວກເຮົາຈະສອນໄດ້ຢ່າງມີປະສິດທິຜົນດີ ຖ້າພວກເຮົາຮູ້ ແລະ

ຄຳນຶງເຖິງຄວາມຕ້ອງການໃນການຮຽນຮູ້ ແລະ ຄວາມສົນໃຈ ຂອງ ເດັກພວກເຮົາ. ໃນຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍ, ຄູຈະຕ້ອງມອງເຫັນທຸກສິ່ງຢ່າງ ທີ່ເດັກ ເວົ້າ ຫລື ປະດິດສ້າງ ເປັນຂໍ້ມູນທີ່ມີປະໂຫຍດ ເພື່ອເຂົ້າໃຈເດັກຜູ້ຮຽນ ແລະ ເພື່ອ ວາງແຜນການສິດສອນບົດຮຽນ ສຳລັບເດັກຜູ້ນັ້ນ.

- **ເດັກທຸກຄົນມີວຽກເຮັດທີ່ເຫມາະສົມ.** ໃນຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍ, ເປົ້າປະສົງຂອງຄູນັ້ນ ແມ່ນເພື່ອເຮັດໃຫ້ເດັກແຕ່ລະຄົນຮູ້ສຶກຕື່ນເຕັ້ນຕະຫຼອດ ແລະ ເດັກແຕ່ລະຄົນ ຕ້ອງເຫັນວ່າ ການຮຽນຂອງຕົນ ເປັນໜ້າສົນໃຈຢູ່ຕະຫຼອດ.
- **ຄູ ແລະ ນັກຮຽນ ແມ່ນຜູ້ຮ່ວມມືກັນໃນການຮຽນຮູ້.** ຄູຈະປະເມີນຄວາມຕ້ອງການ ທີ່ຈຳເປັນ ໃນການຮຽນຮູ້, ຄອຍໃຫ້ຄວາມສະດວກໃນການຮຽນ ແລະ ວາງແຜນການ ຫຼັກສູດທີ່ມີປະສິດທິຜົນ. ໃນຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍ, ຄູຈະສຶກສາ ເບິ່ງເດັກຂອງຕົນ ແລະ ດຶງເອົາເຂົາເຂົ້າມີສ່ວນຮ່ວມ ໃນການຕັດສິນໃຈຢ່າງຕໍ່ເນື່ອງ ກ່ຽວກັບຫ້ອງຮຽນ. ຜົນຂອງການປະຕິບັດ ຄືດັ່ງກ່າວ ຈະເຮັດໃຫ້ເດັກກາຍເປັນຜູ້ຮຽນ ທີ່ເປັນອິດສະຫລະຫລາຍຂຶ້ນ.

ມີສິ່ງໃດແດ່ທີ່ອາດສາມາດມີຄວາມແຕກຕ່າງກັນໄດ້ຫຼາກຫຼາຍ?

ເນື້ອໃນ. ເນື້ອໃນຈະປະກອບດ້ວຍຄວາມຈິງ, ແນວຄວາມຄິດ, ສິ່ງທີ່ ຍອມຮັບຮູ້ກັນທົ່ວໄປ ຫຼື ຫຼັກການຕ່າງໆ, ທັດສະນະຄະຕິ ແລະ ທັກສະທີ່ກ່ຽວຂ້ອງກັບວິຊາຮຽນ ແລະ ຫົວຂໍ້ທີ່ພວມສຶກສາ ຄົ້ນຄວ້າ. ເນື້ອໃນຈະປະກອບດ້ວຍສິ່ງທີ່ຄູວາງແຜນໃຫ້ເດັກໄດ້ຮຽນຮູ້ ລວມທັງ ວິທີທີ່ເດັກຈະສາ ມາດຮຽນຮູ້ໄດ້ຢ່າງແທ້ຈິງບັນດາຄວາມຮູ້, ຄວາມເຂົ້າໃຈ ແລະ ທັກສະທີ່ຕ້ອງການ. ໃນຫ້ອງຮຽນ ທີ່ມີຄວາມແຕກຕ່າງຫຼາກຫຼາຍ, ຂໍ້ເທັດຈິງທີ່ສຳຄັນ, ເອກະສານຂໍ້ມູນທີ່ຕ້ອງເຂົ້າໃຈ ແລະ ທັກສະ ຕ່າງໆຕ້ອງຮັກສາໄວ້ຢ່າງຕໍ່ເນື່ອງ ສຳລັບຜູ້ຮຽນທຸກຄົນ. ສິ່ງທີ່ໜ້າຈະຕ້ອງປ່ຽນແປງ ທີ່ສຸດໃນຫ້ອງ ຮຽນທີ່ແຕກຕ່າງຫຼາກຫຼາຍ ກໍຄື ວິທີທີ່ເດັກຈະສາມາດເຂົ້າເຖິງແກ່ນແທ້ຂອງການຮຽນຮູ້. ບາງແນວ ທາງທີ່ຄູອາດສາມາດເຮັດໃຫ້ເດັກ ເຂົ້າເຖິງເນື້ອໃນບົດຮຽນດ້ວຍວິທີຕ່າງໆນັ້ນ ຈະປະກອບດ້ວຍ ວິທີການດັ່ງລຸ່ມນີ້:

- ໃຊ້ສື່-ອຸປະກອນຈິງສຳລັບຜູ້ຮຽນບາງຄົນ ເພື່ອຊ່ວຍໃຫ້ເດັກເຂົ້າໃຈແນວຄວາມຄິດ ໃໝ່ກ່ຽວກັບຄະນິດສາດ ຫລືວິທະຍາສາດ;
- ໃຊ້ບົດອ່ານທີ່ມີລະດັບແຕກຕ່າງກັນຫຼາຍກວ່າໜຶ່ງບົດ;
- ໃຊ້ການກຸ່ມໃຫ້ມີຫຼາຍຄູ່ອ່ານເພື່ອສະໜັບສະໜູນ ແລະ ທ້າທາຍເດັກທີ່ພວມເຮັດວຽກ ກັບເອກະສານເນື້ອໃນຕ່າງໆ;
- ສອນຄືນອີກສຳລັບເດັກຜູ້ທີ່ຕ້ອງການໃຫ້ມີການສາທິດແບບອື່ນຕື່ມ.

- ♦ ໃຊ້ປຶດອ່ານ, ເຄື່ອງບັນທຶກສຽງ, ໂປສະເຕີ ແລະ ວີດີໂອ ເປັນແນວທາງໄປສູ່ການ ຮຽນຮູ້ ແນວຄວາມຄິດຫຼັກຕໍ່ຜູ້ຮຽນທີ່ແຕກຕ່າງກັນ.

ກິດຈະກຳ: ກິດຈະກຳທີ່ຈະມີປະສິດທິຜົນນັ້ນ ຕ້ອງດຶງເອົາເດັກເຂົ້າມີສ່ວນຮ່ວມ ໃນການນຳໃຊ້ທັກສະທີ່ສຳຄັນເພື່ອເຂົ້າໃຈແນວຄວາມຄິດຫຼັກ ແລະ ຕ້ອງມີເປົ້າປະສົງສະເພາະ ຂອງການຮຽນຮູ້ນັ້ນ. ຕົວຢ່າງ: ທ່ານສາມາດທີ່ຈະເຮັດໃຫ້ກິດຈະກຳແຕກຕ່າງກັນໄປ ໂດຍການໃຫ້ ທາງເລືອກຫຼາຍລະ ດັບຂອງຄວາມຍາກ (ເຊັ່ນ - ທາງເລືອກ 1 - ງ່າຍ, ທາງເລືອກ 2 - ຍາກປານ ກາງ ຫຼື ຖ້າເປັນທາງເລືອກ ທີ 3 -ຈະຍາກທີ່ສຸດ). ທ່ານຍັງສາມາດທີ່ຈະແຍກ ຄວາມແຕກຕ່າງ ຂອງກິດຈະກຳ ໂດຍໃຫ້ທາງເລືອກ ຫຼາກຫຼາຍທີ່ ອີງໃສ່ຄວາມສົນໃຈທີ່ແຕກຕ່າງກັນຂອງເດັກ. ທ່ານສາມາດສະເໜີຈຳນວນຄັ້ງທີ່ແຕກຕ່າງກັນໃນການຊ່ວຍເຫລືອຈາກຄູ ແລະ ນັກຮຽນ ສຳລັບ ແຕ່ລະ ກິດຈະກຳ.

ຜົນງານຕ່າງໆ: ທ່ານຍັງສາມາດແຍກຄວາມແຕກຕ່າງຂອງຜົນງານໄດ້ອີກ.ຜົນງານແມ່ນ ສິ່ງຕ່າງໆທີ່ເດັກສາມາດໃຊ້ເພື່ອສະແດງເຖິງສິ່ງທີ່ເຂົາໄດ້ຮຽນຮູ້ມາ ແລະ ເຂົ້າໃຈ. ຕົວຢ່າງ: ຜົນງານອາດສາມາດເປັນສະໝຸດບັນທຶກຜົນງານທີ່ເດັກເຮັດຜ່ານມາ, ການວາງສະແດງການແກ້ ໄຂບັນຫາ, ບົດໂຄງການທີ່ສຳເລັດ ຫລື ບົດກວດກາທີ່ທ້າທາຍແບບໃຊ້ເຈ້ຍ-ສໍ. ຜົນງານທີ່ດີຈະ ເປັນຕົ້ນເຫດ ໃຫ້ເດັກຫວນຄິດຄືນ ໃນສິ່ງທີ່ເຂົາໄດ້ຮຽນຮູ້ມາ, ນຳໃຊ້ສິ່ງທີ່ເຂົາສາມາດເຮັດໄດ້ ແລະ ເສີມຂະຫຍາຍຄວາມເຂົ້າໃຈ ແລະ ທັກສະຂອງເຂົາ. ແນວທາງເພື່ອສ້າງຄວາມແຕກຕ່າງ ດ້ານຜົນງານສາມາດປະຕິບັດໄດ້ ດັ່ງລຸ່ມນີ້:

- ♦ ອະນຸຍາດໃຫ້ເດັກຊ່ວຍອອກແບບຜົນງານແບບຕ່າງໆ ທີ່ສາມາດສະແດງອອກໄດ້ຢູ່ ໃນຂອບເຂດເປົ້າປະສົງຂອງການຮຽນຮູ້ທີ່ສຳຄັນ.
- ♦ ຊຸກຍູ້ໃຫ້ເດັກສະແດງອອກສິ່ງທີ່ເຂົາໄດ້ຮຽນຮູ້ຜ່ານມາດ້ວຍວິທີຕ່າງໆ.
- ♦ ອະນຸຍາດໃຫ້ມີການກຸ່ມງານດ້ວຍຮູບແບບຕ່າງໆໄດ້ (ຕົວຢ່າງ: ເຮັດຄົນດຽວ ຫຼື ເຮັດ ຮ່ວມໝູ່ເປັນກຸ່ມ/ທີມ ເພື່ອຜະລິດຜົນງານໃຫ້ສຳເລັດ).
- ♦ ສະໜອງ ຫຼື ຊຸກຍູ້ໃຫ້ນຳໃຊ້ຊັບພະຍາກອນທີ່ຫຼາກຫຼາຍ ໃນການກະກຽມສ້າງຜົນງານ ຕ່າງໆ.
- ♦ ໃຊ້ວິທີປະເມີນຫຼາກຫຼາຍຮູບແບບ.

ກິດຈະກຳສະທ້ອນພາບ: ການຮ່າງແຜນການສອນບົດຮຽນ

ເມື່ອຮ່າງແຜນການສອນບົດຮຽນໃດໜຶ່ງ, ທ່ານສາມາດທີ່ຈະຈຳແນກຄວາມແຕກຕ່າງ ຂອງເນື້ອ ໃນບົດຮຽນ ແລະ ກິດຈະກຳຕ່າງໆໄດ້ບໍ?

ເດັກທຸກຄົນສາມາດເຂົ້າເຖິງຂໍ້ມູນຄວາມຮູ້ ແລະ ກິດຈະກຳທີ່ແຕກຕ່າງຫຼາກຫຼາຍ ເພື່ອທີ່ ຈະໄດ້ ຮຽນຮູ້ຕາມວິທີທີ່ຕົນຖະໜັດ ແລະ ຢູ່ໃນລະດັບທີ່ເໝາະສົມ ຫຼືບໍ?

ທ່ານໄດ້ນຳໃຊ້ “ຜົນງານ” ທີ່ດີເດັ່ນຫຼາຍຢ່າງ ເພື່ອສະແດງໃຫ້ເຫັນວ່າເດັກແຕ່ລະຄົນໄດ້ຮຽນຮູ້ຫຍັງແດ່?

5.9 ການຄຸ້ມຄອງຫ້ອງຮຽນທີ່ມີລັກສະນະຕັ້ງໜ້າ ແລະ ແບບຮຽນຮ່ວມ

ການຄຸ້ມຄອງການຮຽນຮູ້ແບບຕັ້ງໜ້າຈະກ່ຽວໂຍງກັບຫຼາຍອົງປະກອບທີ່ແຕກຕ່າງກັນ. ເມື່ອມີຄວາມສົມດູນ ລະຫວ່າງການຮຽນຮູ້ແບບຊີ້ນຳດ້ວຍຕົນເອງ, ແບບເພື່ອນສອນເພື່ອນ, ແບບກຸ່ມ ແລະ ການສອນ ໂດຍກົງແລ້ວ, ມັນຈະເຮັດໃຫ້ວຽກຂອງເຮົາງ່າຍຂຶ້ນ ແລະ ຈະຊ່ອຍໃຫ້ເດັກຮຽນຮູ້ໄປຕາມຫຼາຍແນວທາງ. ນີ້ຄືບາງສິ່ງບາງຢ່າງທີ່ສຳຄັນ ເຊິ່ງທ່ານສາມາດພິຈາລະນາໃຊ້ເພື່ອເພີ່ມທະວີລະດັບ ການຮຽນຮູ້ແບບຕັ້ງໜ້າໃນຫ້ອງຮຽນ.

ການວາງແຜນ. ໃຫ້ສ້າງແຜນປະຈຳອາທິດ ດ້ວຍການຈັດວາງກິດຈະກຳຕ່າງໆຂອງຫ້ອງຮຽນ. ໃຫ້ຊີ້ບອກວ່າຈະໃຫ້ເດັກເຮັດວຽກແບບອິດສະຫຼະ, ແບບເປັນກຸ່ມຍ່ອຍ ຫຼື ໝົດຫ້ອງ. ຢູ່ໃນຫ້ອງຄວບ, ແຕ່ລະກຸ່ມອາດຈະເຮັດກິດຈະກຳຕ່າງກັນ.

ການກະກຽມ. ໃຫ້ກະກຽມແຕ່ລະກິດຈະກຳຂອງຫ້ອງຮຽນ ດ້ວຍການທົບທວນເບິ່ງຄູ່ມືຄູ ຫຼື ວາງຮ່າງແຜນການສອນ. ກວດເບິ່ງຄືນເພື່ອໃຫ້ແນ່ໃຈວ່າ ເດັກທຸກຄົນຈະສາມາດ ເຂົ້າຮ່ວມກິດຈະກຳການຮຽນຮູ້ໄດ້.

ການລວບລວມແຫຼ່ງຊັບພະຍາກອນຕ່າງໆ. ລວບລວມ ຫຼື ສ້າງຊັບພະຍາກອນຕ່າງໆ ທີ່ຈຳເປັນ ສຳລັບກິດຈະກຳ. ສິ່ງເຫຼົ່ານີ້ອາດຈະເປັນກ້ອນຫີນ ຫຼື ໄມ້ທ່ຽ ເພື່ອໃຊ້ເປັນອຸປະກອນວິຊາຄະນິດສາດ, ເປືອກຫອຍທະເລ ສຳລັບກິດຈະກຳສິລະປະກຳ ຫຼື ແກ່ນຖົ່ວ ເພື່ອເຮັດຖົ່ວງອກໃນວິຊາວິທະຍາສາດ ເພື່ອສຶກສາການຈະເລີນເຕີບໂຕຂອງພືດ.

ການເຊື່ອມຜູ້ຮຽນໃສ່ກິດຈະກຳ. ບໍ່ວ່າກິດຈະກຳການຮຽນຮູ້ ຈະເປັນການສົນທະນາໝົດຫ້ອງ ຫຼື ເຮັດເປັນໂຄງການປະຕິບັດການຄົ້ນຄວ້າໂດຍກຸ່ມຕ່າງໆ, ທ່ານສາມາດທີ່ຈະແນະນຳສິ່ງດັ່ງກ່າວ ໃຫ້ແກ່ນັກຮຽນໂດຍຜ່ານການສອນໂດຍກົງ. ພະຍາຍາມເຮັດໃຫ້ຂໍ້ມູນຄວາມຮູ້ ຫຼື ທັກສະໄດ້ຮັບການຮຽນຮູ້ຢ່າງມີຄວາມໝາຍຕໍ່ເດັກ.

ການເຊື່ອມຜູ້ຮຽນໃຫ້ເຂົ້າເຖິງກັນ. ນຳໃຊ້ຈຸດເດັ່ນຂອງວິທີການ ທີ່ເດັກສາມາດຊ່ອຍເຫຼືອເຊິ່ງກັນ ແລະ ກັນໃນການຮຽນເປັນຄູ ແລະ ເປັນກຸ່ມ. ສິ່ງເສີມການຮຽນແບບ ເພື່ອນສອນເພື່ອນທຸກເທື່ອ ທີ່ເປັນໄປໄດ້.

ການແນະນຳ ແລະ ການສັງເກດ. ເວລາທີ່ເດັກພວມເຮັດກິດຈະກຳ ຫຼື ໂຄງການ ຕ່າງໆຢູ່ນັ້ນ (ບໍ່ວ່າຈະເຮັດຄົນດຽວ, ເປັນຄູ່ ຫຼື ເປັນກຸ່ມ), ໃຫ້ທ່ານເຄື່ອນໄຫວໄປທົ່ວຫ້ອງຮຽນ. ວາງຕົວທ່ານ ໃຫ້ພ້ອມທີ່ຈະຕອບຄຳຖາມ ແລະ ແນະນຳນັກຮຽນເພື່ອແກ້ໄຂອຸປະສັກຕ່າງໆ. ໃຫ້ໃຊ້ເວລາ

ນີ້ປະເມີນຜົນໄປພ້ອມ; ຕົວຢ່າງ: ປະເມີນເບິ່ງວ່າເດັກມີ ສະມາທິດີສໍ່າໃດ ແລະ ແນວທາງທີ່ເຂົາ ປະຕິສໍາພັນກັນເປັນໄປແນວໃດ.

ໃຫ້ເນັ້ນໃສ່ການມີສ່ວນຮ່ວມ. ວິທີການ ແລະ ແນວຄວາມຄິດທັງໝົດດັ່ງກ່າວມານີ້ ຈະ ຊ່ວຍສ້າງໂອກາດ ເພື່ອການຮຽນຮູ້ແບບຕັ້ງໜ້າສໍາລັບທຸກຄົນ. ຕົວຢ່າງ: ໃນຫ້ອງຮຽນ ເຫຼົ່ານີ້, ເດັກຍິງ ບໍ່ໄດ້ຖືກ ຄອບງໍາໂດຍເດັກຊາຍ, ເດັກທີ່ອ່ອນກວ່າບໍ່ໄດ້ຖືກຄອບງໍາໂດຍເດັກ ທີ່ແກ່ກວ່າ ແລະ ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນບໍ່ໄດ້ຖືກປະປ່ອຍ, ບໍ່ໄດ້ປ່ອຍໃຫ້ຢູ່ ນອກການປະຕິບັດກິດຈະກໍາ ຫຼື ໂອກາດໃນການຮຽນຮູ້ໃດໆ.

ກິດຈະກໍາສະທ້ອນພາບ: ທ່ານຈະຈັດລະດັບຫ້ອງຮຽນຂອງທ່ານແນວໃດ?

ຫ້ອງຮຽນຂອງຂ້ອຍ	**1** **ແມ່ນ**	**2** **ສາມາດເຮັດ ໄດ້ດີກວ່ານີ້**	**3** **ຈໍາເປັນຕ້ອງ ປັບປຸງຫຼາຍ**
ຫ້ອງຮຽນຂອງຂ້ອຍເປັນລະບຽບ			
ຂ້ອຍໃຊ້ທີ່ວ່າງໃນຫ້ອງຮຽນໄດ້ດີ			
ມີແສງສະຫວ່າງຢ່າງພຽງພໍໃນຫ້ອງຮຽນຂອງຂ້ອຍ			
ມີສິ່ງທີ່ໜ້າສົນໃຈໃນຫ້ອງຮຽນຂອງຂ້ອຍ (1) ຢູ່ບົນຝາຫ້ອງຮຽນ ແລະ /ຫຼື (2) ຢູ່ມຸມຮຽນຮູ້ຄະນິດສາດ ແລະ ວິທະຍາສາດ			
ເດັກທຸກຄົນເຂົ້າເຖິງ ສື່ ອຸປະກອນເຝິກຫັດ ສໍາລັບຄະນິດສາດ			
ເດັກທຸກຄົນສາມາດເຄື່ອນໄຫວໄປມາງ່າຍໃນ ຫ້ອງຮຽນເພື່ອໄປເອົາສື່ ອຸປະກອນການຮຽນຮູ້			
ເດັກທຸກຄົນສົນໃຈໃນການຮຽນຮູ້ຂອງຕົນ			
ເດັກທຸກຄົນສາມາດຮຽນຮູ້/ເຮັດວຽກໄດ້ຢ່າງງ່າຍດາຍ (1) ກັບຊາຄູ່ ແລະ /ຫຼື (2) ໃນກຸ່ມຍ່ອຍ			
ເດັກທຸກຄົນມັກຈະຖາມຄໍາຖາມຕ່າງໆ			
ເດັກທຸກຄົນມີຄວາມໝັ້ນໃຈໃນການຕອບຄໍາຖາມ			
ເດັກທີ່ມີບັນຫາດ້ານສາຍຕາ ແລະ ການໄດ້ຍິນ ກໍສາມາດເຂົ້າເຖິງສື່ອຸປະກອນທີ່ສາມາດ ຊ່ວຍ ເຂົາໄດ້			

ສື ອຸປະກອນການຮຽນຮູ້ໄດ້ມີການປັບ ເພື່ອໃຫ້ສອດຄ່ອງກັບບົດບາດຍິງຊາຍ ແລະ ຊົນເຜົ່າ			
ເດັກທຸກຄົນໃນຫ້ອງຮຽນຂອງຂ້ອຍ ສາມາດຮັບໜ້າທີ່ຄວາມຮັບຜິດຊອບ			

ກິດຈະກຳສະທ້ອນພາບ: ການປະຕິບັດການ

ໃຫ້ຄິດເຖິງສິ່ງທີ່ທ່ານໄດ້ອ່ານຜ່ານມາ ແລະ ໃຫ້ພິຈາລະນາວ່າ ທ່ານ ຈະສາມາດນຳໃຊ້ບາງແນວຄວາມຄິດໃນຫ້ອງຮຽນຂອງທ່ານຄືແນວໃດ. ເມື່ອທ່ານໄດ້ຄົ້ນຄວ້າຄຳຖາມ ແລະ ຕົວຢ່າງຢູ່ຕາຕະລາງຂ້າງລຸ່ມແລ້ວ, ໃຫ້ກຳນົດກິດຈະກຳ ທີ່ພໍເປັນໄປໄດ້ທີ່ຈະໃຊ້ໄດ້ຜົນໃນຫ້ອງຮຽນ.

ໃນຕອນທ້າຍຂອງອາທິດ:

ການສະທ້ອນພາບຕົນເອງ	ຕົວຢ່າງ	ກິດຈະກຳວາງແຜນທີ່ພໍ ເປັນໄປໄດ້
ຂ້ອຍໄດ້ວາງແຜນກິດຈະກຳຕ່າງໆ ເພື່ອໃຫ້ເດັກທຸກຄົນໄດ້ຮັບໂອກາດ ເພື່ອສະແດງຄວາມຮູ້ສຶກຫຼືບໍ່?	ພາຍຫຼັງອ່ານບົດເລື່ອງແລ້ວ, ຈຶ່ງຖາມເດັກວ່າເຂົາມີຄວາມຮູ້ສຶກແນວໃດກ່ຽວກັບເລື່ອງທີ່ເກີດຂຶ້ນ. ເຂົາຄິດວ່າມັນຈົບລົງດ້ວຍຄວາມເສົ້າ ຫຼື ດ້ວຍຄວາມສຸກ?	
ຂ້ອຍໄດ້ວາງແຜນກິດຈະກຳຕ່າງໆ ເພື່ອໃຫ້ເດັກທຸກຄົນມີຄວາມທ້າວທັນດ້ານ ຮ່າງກາຍຫຼືບໍ່?	ໃຫ້ໂອກາດເດັກໄດ້ຫຼິ້ນເກມຕ່າງໆ ຫຼື ຍ່າງເລາະຕາມ ເດີ່ນໂຮງຮຽນ ເພື່ອໄປເບິ່ງຖ້າເດັກທຸກຄົນພວມຫຼິ້ນກັນຢູ່.	
ຂ້ອຍໄດ້ວາງແຜນກິດຈະກຳຕ່າງໆ ທີ່ທ້າທາຍດ້ານສະຕິປັນຍາສຳລັບ ເດັກຍິງ ແລະ ເດັກຊາຍຫຼືບໍ່?	ໃຫ້ເວລາເດັກເພື່ອປະຕິບັດ ກິດຈະກຳແກ້ໄຂບັນຫາ.	
ຂ້ອຍໄດ້ວາງແຜນກິດຈະກຳຕ່າງໆ ທີ່ອະນຸຍາດໃຫ້ເດັກທຸກຄົນໄດ້ປະຕິສຳພັນກັນ ທາງສັງຄົມຫຼືບໍ່?	ຈັດຕັ້ງເດັກເປັນກຸ່ມເພື່ອສ້າງຕົວແບບ, ແລ້ວແກ້ບັນຫາ ແບບຮ່ວມມືກັນ, ເຮັດວຽກຢູ່ ສວນຄົວ, ເປັນສະມາຊິກຂອງຄະນະກຳມະການຫ້ອງ ແລະ ອື່ນໆ	

ຄຳຖາມ

1. ການເຮັດວຽກເປັນກຸ່ມຄູຄວນນຳໃຊ້ວິທີໃດແດ່?
2. ການຈັດກຸ່ມແນວໃດຈຶ່ງເໝາະສົມກັບການຮຽນການສອນແບບຮຽນຮ່ວມ?
3. ການຈັດການຮຽນຮູ້ແບບເພື່ອນຊ່ວຍເພື່ອນຄູຄວນຈັດແນວໃດຈຶ່ງຈະເໝາະສົມ?
4. ຄວາມສຳຄັນຂອງການຮຽນຮູ້ດ້ວຍຕົນເອງມີຄືແນວໃດ?
5. ມີຫລັກການພື້ນຖານອັນໃດແດ່ ? ທີ່ສະໜັບສະໜູນການສອນສຳລັບຄວາມແຕກຕ່າງ ຂອງເດັກ.
6. ການຄຸ້ມຄອງຫ້ອງຮຽນຮ່ວມແບບລັກສະນະຕັ້ງໜ້າມີຄືແນວໃດ?

ບົດທີ 6
ການປະເມີນຜົນແບບຕັ້ງໜ້າ ແລະ ແບບຕົວຈິງ

ນາງ ມາລາ ນັ່ງຮ້ອງໄຫ້ຢູ່ແຈຫ້ອງ. ລາວເສັງເລື່ອນຊັ້ນ ປ.3 ບໍ່ຜ່ານ. ລາວໄດ້ພະຍາມຮຽນຢ່າງໜັກໃນໄລຍະເວລາປີຮຽນທັງໝົດ ແລະ ໄດ້ຮັບຄະແນນດີໃນພາກການເຮັດສຳຫຼວດພາກປະຕິບັດ ແລະ ການ ກວດການປະຈຳອາທິດ. ສາມອາທິດກ່ອນການສອບເສັງ, ແມ່ຂອງລາວເຈັບປ່ວຍ ແລະ ນາງ ມາລາ ກໍໄດ້ເປັນຜູ້ຮັບຜິດຊອບດູແລນ້ອງຊາຍ ແລະ ນ້ອງສາວ. ລາວຈຳຕ້ອງຂາດໂຮງຮຽນບາງວັນໃນຂະນະທີ່ຜູ້ອື່ນໆ ໃນຫ້ອງຂອງລາວໄດ້ກະກຽມການສອບເສັງ. ການຄືນກ່ອນການສອບເສັງລາວຕ້ອງເຝົ້າດູແລແມ່ໝົດຄືນ. ໃນລະຫວ່າງການສອບເສັງ, ລາວບໍ່ສາມາດຈະສັງລວມສະມາທິໄດ້ ແລະ ບໍ່ສາມາດຈື່ຈຳສິ່ງທີ່ລາວໄດ້ຄົ້ນຄວ້າຮ່ຳຮຽນມາໄດ້ພໍສຳໃດ ຍ້ອນລາວອິດເມື່ອຍ. ການຮ້ອງໄຫ້ຂອງລາວໄດ້ຊ່ວຍ ໃຫ້ລາວໄດ້ສະແດງອອກເຖິງຄວາມຜິດຫວັງ. ລາວອາດຕ້ອງຮຽນຄືນຫ້ອງເກົ່າໝົດທັງປີ. ລາວຈະບໍ່ສາມາດສືບຕໍ່ຮຽນກັບເພື່ອນ. ລາວຮູ້ສຶກເໝືອນກັບວ່າໄດ້ອອກຈາກໂຮງຮຽນໄປແລ້ວ.

ເດັກຈຳນວນບໍ່ໜ້ອຍ, ໂດຍສະເພາະເດັກຍິງປະລະໂຮງຮຽນ ຍ້ອນຄວາມຮຽກຮ້ອງຕ້ອງການຂອງຄອບຄົວ ແລະ ບາງຄັ້ງກໍຍ້ອນວ່າເຂົາບໍ່ມີຄວາມມ່ວນຊື່ນໃນການໄປໂຮງຮຽນ. ບົດເລື່ອງຂ້າງເທິງ ສະແດງໃຫ້ເຫັນບັນຫາດັ່ງກ່າວ ແລະ ມັນຍັງສໍ່ໃຫ້ເຫັນບັນຫາການສອບເສັງຂອງເດັກທີ່ມີພຽງຄັ້ງດຽວຕໍ່ປີ ເພື່ອປະເມີນຄວາມກ້າວໜ້າຂອງພວກເຂົາ. ໃນຖານະທີ່ເປັນຄູ, ພວກເຮົາຈຳເປັນຕ້ອງເຂົ້າໃຈເດັກໆໃຫ້ດີກວ່າເກົ່າ ແລະ ຕ້ອງຮຽນຮູ້ວິທີປະເມີນການຮຽນຂອງເຂົາດ້ວຍຫຼາຍແນວທາງ. ດັ່ງນັ້ນ, ພາບພັດທະນາການ ແລະ ຜົນສຳເລັດຂອງເດັກທີ່ສົມບູນແບບກວ່າອາດສາມາດ ປະດິດສ້າງ ຂຶ້ນໄດ້.

6.1 ການປະເມີນຜົນ

ການປະເມີນຜົນເປັນແນວທາງຂອງການສັງເກດ, ການເກັບກຳຂໍ້ມູນແລ້ວຕັດສິນບົນຂໍ້ມູນຂ່າວສານນັ້ນ. ການປະເມີນຜົນຕໍ່ເນື່ອງໝາຍເຖິງການສ້າງການສັງເກດຢ່າງຕໍ່ເນື່ອງ ເພື່ອກຳນົດສິ່ງທີ່ເດັກຮູ້, ສິ່ງທີ່ເດັກເຂົ້າໃຈ ແລະ ສິ່ງທີ່ເດັກສາມາດເຮັດໄດ້. ການສັງເກດເຫຼົ່ານີ້ຈະຕ້ອງເຮັດຫຼາຍໆ ຄັ້ງ ລະຫວ່າງ ປີຮຽນ ເຊັ່ນ ໄລຍະຕົ້ນ, ກາງ ແລະ ທ້າຍພາກຮຽນ ຫຼື ອາດຈະຖີ່ກວ່ານີ້. ການປະເມີນຜົນ ຕໍ່ເນື່ອງສາມາດບັນລຸໄດ້ໂດຍຜ່ານ: ການສັງເກດ, ແຟ້ມບັນທຶກຜົນງານ, ບັນຊີກວດກາທັກສະ, ຄວາມຮູ້ ແລະ ພຶດຕິກຳ, ບົດກວດກາ ແລະ ສອບເສັງ,ການປະເມີນຜົນຕົນເອງ ແລະ ໜັງສື ຫຼື ວາລະສານສະທ້ອນພາບ.

ການປະເມີນຜົນຕໍ່ເນື່ອງຈະເຮັດໃຫ້ແນ່ໃຈວ່າ ເດັກທຸກຄົນມີໂອກາດປະສົບຜົນສຳເລັດໃນໂຮງຮຽນ. ດ້ວຍການນຳໃຊ້ການປະເມີນຜົນຕໍ່ເນື່ອງ, ຄູສາມາດປັບການວາງແຜນ ແລະ ການ

ສອນ ໃຫ້ເປັນໄປຕາມຄວາມຕ້ອງການຂອງຜູ້ຮຽນ ເພື່ອຈະໃຫ້ທຸກຄົນມີໂອກາດຮຽນຮູ້ ແລະ ປະສົບຜົນສຳເລັດ.

ໃນການປະເມີນຜົນຕໍ່ເນື່ອງນັ້ນ, ນັກຮຽນທຸກຄົນມີໂອກາດສະແດງສິ່ງທີ່ເຂົາຮູ້ ແລະ ສາມາດເຮັດໄດ້ດ້ວຍຫຼາຍແນວທາງທີ່ແຕກຕ່າງກັນ ຂຶ້ນກັບແບບວິທີການຮຽນຮູ້ທີ່ແຕກຕ່າງກັນ ຂອງເຂົາ. ການປະເມີນຜົນຕໍ່ເນື່ອງສາມາດບອກທ່ານໄດ້ວ່າ ເດັກກຸ່ມໃດທີ່ຮຽນບໍ່ທັນໝູ່/ບໍ່ທັນເຂົ້າໃຈໃນບາງຫົວຂໍ້ບົດຮຽນ. ຈາກນັ້ນທ່ານກໍຈະສາມາດອອກແບບໂອກາດໃນການຮຽນຮູ້ໃໝ່ ສຳລັບເດັກເຫຼົ່ານີ້ໄດ້. ການສ່ອງແສງຄືນຢ່າງຕໍ່ເນື່ອງ ທີ່ເດັກໄດ້ຮັບດ້ວຍຂະບວນການນີ້ ຈະຊ່ວຍໃຫ້ເຂົາຮູ້ວ່າຮຽນດີ ຫຼືບໍ່ ລວມທັງ ປະຕິບັດການທີ່ຈຳເປັນທີ່ເຂົາຕ້ອງເຮັດ ເພື່ອຄວາມກ້າວໜ້າ.

ການປະເມີນຜົນຕໍ່ເນື່ອງສາມາດທີ່ຈະຊ່ວຍທ່ານເວົ້າຈາກັບພໍ່ແມ່ ຜູ້ປົກຄອງ ກ່ຽວກັບ ຈຸດແຂງ ແລະ ຈຸດອ່ອນຂອງເດັກ ເພື່ອວ່າເຂົາຈະສາມາດປະກອບສ່ວນ ໃນໂຄງການແບບບູລະນາການ ເຊັ່ນ ໂຄງການທີ່ເຊື່ອມກິດຈະກຳ ລະຫວ່າງ ຫ້ອງຮຽນ ແລະ ໂຮງຮຽນ. ໂດຍປົກກະຕິ ແລ້ວ ຜົນການສອບເສັງທ້າຍປີຈະອອກມາຊ້າ ສຳລັບທີ່ຈະໃຫ້ພໍ່ແມ່ຜູ້ປົກຄອງຊ່ວຍລູກຫຼານທີ່ອາດຈະຮຽນອ່ອນ.

6.2 ຜົນໄດ້ຮັບຂອງການຮຽນຮູ້

ຄືດັ່ງທີ່ພວກເຮົາໄດ້ຮຽນຮູ້ໃນເຄື່ອງມືທີ່ແລ້ວ, ກິດຈະກຳການຮຽນຮູ້ແຕ່ລະຢ່າງ ຄວນຈະມີຈຸດປະສົງທີ່ຈຳເປັນຕ້ອງຖືກປະເມີນໃນແນວທາງໃດໜຶ່ງ. ການປະເມີນຜົນຕ່າງໆຄວນຈະພັນລະນາເຖິງຜົນໄດ້ຮັບຂອງການຮຽນຮູ້; ນັ້ນໝາຍວ່າ ມັນຈະບອກໃຫ້ເຮົາຮູ້ວ່າເດັກໄດ້ມີການພັດທະນາບັນດາທັກສະ, ຄວາມຮູ້ ແລະ ພຶດຕິກຳດີພຽງໃດ ຕະຫຼອດເວລາ ຂອງການຮຽນຮູ້ກິດຈະກຳ, ຫົວຂໍ້ບົດຮຽນໃດໜຶ່ງ ຫຼື ໜ່ວຍຫຼັກສູດໃດໜຶ່ງ. ບົດພັນລະນາກ່ຽວກັບ ຜົນໄດ້ຮັບຂອງການຮຽນຮູ້ ມັກຈະເອີ້ນກັນວ່າມາດຕະຖານ ຫຼື ຈຸດປະສົງຂອງການຮຽນຮູ້ ແລະ ມັນອາດຈະຖືກກຳນົດສຳລັບວິຊາຮຽນ, ທັກສະ ແລະ ຂັ້ນຮຽນສະເພາະໃດໜຶ່ງ.

ກິດຈະກຳການຮຽນຮູ້ ແລະ ການປະເມີນຜົນຈະດີຂຶ້ນ ຖ້າເມື່ອໃດຄູສາມາດກຳນົດໄດ້ຜົນໄດ້ຮັບຂອງການຮຽນຮູ້. ເວລາວາງແຜນກິດຈະກຳການຮຽນຮູ້ອັນໃໝ່, ໃຫ້ເລີ່ມຕົ້ນດ້ວຍການກຳນົດຜົນໄດ້ຮັບຂອງການຮຽນຮູ້. ທ່ານອາດຈະຕ້ອງການຕອບ 3 ຄຳຖາມ ດັ່ງຕໍ່ໄປນີ້ ເມື່ອທ່ານວາງແຜນກິດຈະກຳ ຂອງທ່ານ.

- ມີທັກສະອັນໃດແດ່ທີ່ຈະຖືກນຳໃຊ້ ຫຼື ຖືກພັດທະນາໂດຍພວກເດັກໆ?
- ມີຂໍ້ມູນຄວາມຮູ້ອັນໃດແດ່ທີ່ຈະຖືກຮຽນຮູ້?
- ມີພຶດຕິກຳອັນໃດແດ່ທີ່ຈະຖືກເຝິກປະຕິບັດ?

ຄຳຕອບຕໍ່ຄຳຖາມເຫຼົ່ານີ້ສາມາດທີ່ຈະຂຽນເປັນປະໂຫຍກຂອງຜົນໄດ້ຮັບຂອງການຮຽນຮູ້. ຕົວຢ່າງ: ຖ້າທ່ານສ້າງບົດຮຽນໜຶ່ງຂຶ້ນ ເຊັ່ງເດັກ ປ.5 ຈະຮຽນຮູ້ກ່ຽວກັບສົມຜົນໄລຍະທາງ-ເວລາ ໃນຄະນິດສາດ, ທ່ານອາດຈະຂຽນຜົນໄດ້ຮັບດັ່ງຕໍ່ໄປນີ້:

- ♦ ນັກຮຽນທີ່ຮຽນແບບອິດສະຫຼະຈະໃຊ້ການຄູນ ແລະ ການຫານ ເພື່ອແກ້ໂຈດສົມຜົນ ເວລາ ແລະ ໄລຍະທາງເປັນວຽກບ້ານ
- ♦ ນັກຮຽນທີ່ຮຽນແບບເປັນຄູ່ ຈະຂຽນໂຈດບັນຫາທີ່ເປັນບົດເລື່ອງ ກ່ຽວກັບຄະນິດສາດ ເພື່ອສະແດງສົມຜົນເວລາ ແລະ ໄລຍະທາງໃນ ການທ່ອງທ່ຽວອາວະກາດ.

ພວກເຮົາສາມາດເຫັນໄດ້ວ່າ ຜົນໄດ້ຮັບຂອງການຮຽນຮູ້ເຫຼົ່ານີ້ຈະລະບຸ:

1. ແມ່ນໃຜ ?
2. ຈະເຮັດຫຍັງ ?
3. ພາຍໃຕ້ເງື່ອນໄຂອັນໃດ?

ຈາກນັ້ນ ອົງປະກອບເຫຼົ່ານີ້ຈະປະສົມປະສານກັນ ດັ່ງນີ້:

1. ນັກຮຽນທີ່ເຮັດວຽກເປັນກຸ່ມຍ່ອຍ,
2. ຈະສ້າງແຜນທີ່ຂອງເດີ່ນໂຮງຮຽນ ແລະ
3. ໃນມາດຕາສ່ວນໜຶ່ງນິ້ວ

ຕົວຢ່າງອື່ນໆ ປະກອບມີ:

- ♦ (1.) ນັກຮຽນ (2.) ຈະສາມາດໃຊ້ວິທີບວກແບບງ່າຍໆເພື່ອແກ້ໂຈດບັນຫາ(3.) ຢູ່ໃນ ບໍລິບົດ (ສະພາບຄວາມເປັນຈິງ) ທີ່ແທ້ຈິງ.
- ♦ (1.) ນັກຮຽນ (2.) ຈະສາມາດຮຽນເຮັດວຽກໃນຖານະເປັນສະມາຊິກກຸ່ມ ເພື່ອສຳ ເລັດກິດຈະກຳການວິໄຈ ແລະ ນຳສະເໜີສະເໜີຜົນວິໄຈ (3.) ແບບຂຽນເປັນບົດ ລາຍງານ.

ເມື່ອເຮົາເບິ່ງຜົນໄດ້ຮັບສະເພາະອັນໃດອັນໜຶ່ງ ເຊັ່ນ ໃນວິຊາວິທະຍາສາດ ຫຼື ຄະນິດ ສາດ, ມັນຈະຊ່ອຍໃຫ້ເກີດປະໂຫຍດ ຖ້າພວກເຮົາມີຮ່າງແນະນຳທີ່ກ່າວເຖິງລະດັບຕ່າງໆ ຂອງ ຜົນທີ່ໄດ້ຮັບທີ່ເຮົາ ຄາດຫວັງສະເພາະກິດຈະກຳໃດໜຶ່ງ. ຢູ່ຂ້າງລຸ່ມນີ້ ຈະເປັນຮ່າງແນະນຳຄືດັ່ງ ໄດ້ກ່າວມາ:

ຜົນໄດ້ຮັບສຳລັບກິດຈະກຳການຈັດປະເພດ/ຈຳແນກສິ່ງຕ່າງໆ

4 - ເດັກວາງສິ່ງຂອງໃສ່ໃນກຸ່ມທີ່ມີຄວາມໝາຍສຳຄັນຂອງມັນ.
ເດັກສົນທະນາເຖິງຄຸນລັກສະນະຕ່າງໆ ທີ່ສຳຄັນຂອງສິ່ງຂອງໃນແຕ່ລະກຸ່ມ. ເດັກພາກັນ ສະຫຼຸບສັງລວມ.

3 - ເດັກວາງສິ່ງຂອງໃສ່ໃນກຸ່ມທີ່ມີຄວາມໝາຍສຳຄັນຂອງມັນ.
ເດັກສົນທະນາເຖິງຄຸນລັກສະນະຕ່າງໆ ທີ່ສຳຄັນຂອງສິ່ງຂອງໃນແຕ່ລະກຸ່ມ.

2 - ເດັກວາງສິ່ງຂອງໃສ່ໃນກຸ່ມທີ່ບໍ່ມີຄວາມໝາຍສຳຄັນພໍເທົ່າໃດ.

1 - ເດັກວາງສິ່ງຂອງໃສ່ໃນກຸ່ມທີ່ບໍ່ມີຄວາມໝາຍ.

0 - ເດັກບໍ່ພະຍາຍາມໃສ່ໃຈເຮັດກິດຈະກຳ

6.3 ວິທີ ແລະ ເຕັກນິກການປະເມີນຜົນແບບຕົວຈິງ

ການປະເມີນຜົນແບບຕົວຈິງ ໝາຍເຖິງການດຶງເອົາເດັກເຂົ້າມີສ່ວນຮ່ວມ ໃນການປະເມີນຜົນສຳເລັດຂອງຕົນ. ການປະເມີນຜົນແບບຕົວຈິງມີລັກສະນະທີ່ອີງໃສ່ຜົນການຮຽນ, ຄວາມເປັນຈິງ ແລະ ຄວາມເໝາະສົມທາງການສິດສອນ. ການສັງເກດຄຽງຄູ່ກັບການເວົ້າລົມກັບນັກຮຽນ ກ່ຽວກັບການຮຽນຮູ້ຂອງເຂົາກໍສາມາດເກີດຂຶ້ນໄດ້ທຸກເມື່ອ.

ການສັງເກດ

ໃນລະຫວ່າງທີ່ມີການສັງເກດຢ່າງເປັນລະບົບນັ້ນ, ເດັກນ້ອຍທັງໝາຍ ຄວນຈະຖືກສັງເກດໃນເວລາທີ່ເຂົາເຮັດວຽກຄົນດຽວ, ເຮັດວຽກເປັນຄູ່, ເຮັດວຽກໃນກຸ່ມຍ່ອຍ, ໃນເວລາທີ່ແຕກຕ່າງກັນ ພາຍໃນໜຶ່ງວັນ ແລະ ໃນບໍລິບົດທີ່ແຕກຕ່າງກັນ. ການສັງເກດ ສາມາດຈະປະກອບມີສິ່ງດັ່ງຕໍ່ໄປນີ້:

ບັນທຶກຫຍໍ້. ນີ້ແມ່ນການຂຽນບັນທຶກກິດຈະກຳຕ່າງໆຂອງນັກຮຽນທີ່ເປັນຂໍ້ເທັດຈິງ ແລະ ບໍ່ມີລັກສະນະພິຖີພິຖັນພໍປານໃດ. ມັນເປັນປະໂຫຍດສຳລັບການບັນທຶກເຫດການຕ່າງໆ ທີ່ເປັນໄປໂດຍ ທຳມະຊາດ.

ຄຳຖາມ. ໜຶ່ງໃນວິທີການທີ່ມີຜົນຂອງການລວບລວມຂໍ້ມູນ ກໍຄືການຖາມເດັກໂດຍໃຊ້ຄຳຖາມໂດຍກົງ ແລະ ຄຳຖາມປາຍເປີດ. ຄຳຖາມປາຍເປີດ ເຊັ່ນ “ຂ້ອຍຢາກໃຫ້ເຈົ້າເລົ່າກ່ຽວກັບ... ໃຫ້ຂ້ອຍຟັງ”, ຈະຊ່ວຍທ່ານປະເມີນຄວາມສາມາດຂອງເດັກ ກ່ຽວກັບ ການສະແດງອອກຂອງເຂົາດ້ວຍການປາກເວົ້າ. ນອກຈາກນີ້, ການຖາມເດັກກ່ຽວກັບກິດຈະກຳຂອງເຂົາກໍມັກຈະເຮັດໃຫ້ມອງເຫັນເລິກເຂົ້າໄປຂ້າງໃນວ່າ ດ້ວຍເຫດໃດເຂົາຈຶ່ງມີພຶດຕິກຳຄືເຊັ່ນນີ້.

ການກວດກາເພື່ອກັ່ນກອງ. ການກວດການີ້ຖືກນຳໃຊ້ເພື່ອກຳນົດໃຫ້ເຫັນທັກສະ ແລະ ຈຸດແຂງດ້ານຕ່າງໆ ທີ່ເດັກໆມີຢູ່ໃນຕົວເຂົາແລ້ວ ເພື່ອວ່າຄູຈະສາມາດວາງແຜນການໃຊ້ປະສົບການການຮຽນຮູ້ ທີ່ມີຄວາມໝາຍສຳຄັນສຳລັບນັກຮຽນຂອງຕົນ. ຜົນກວດກາຄວນຖືກນຳໃຊ້ຄຽງຄູ່ກັບຂໍ້ມູນຂອງຫຼາຍວິຊາຮຽນຢ່າງອື່ນອີກ ທີ່ບັນຈຸຢູ່ໃນເຊັ່ນ ແຟ້ມບັນທຶກຜົນງານດັ່ງທີ່ຈະສົນທະນາຢູ່ຂ້າງລຸ່ມ. ຂໍ້ມູນການປະເມີນບໍ່ຄວນຖືກນຳໃຊ້ ເພື່ອຕີລາຄາເດັກວ່າເປັນຄົນມີປຶ້ມດ້ອຍ.

ການສັງເກດສາມາດທີ່ຈະສະທ້ອນໃຫ້ເຫັນຜົນສຳເລັດຂອງການຮຽນຮູ້, ຂໍ້ຫຍຸ້ງຍາກ ໃນການຮຽນຮູ້ ແລະ ພຶດຕິກຳການຮຽນຮູ້ດັ່ງໃນຕົວຢ່າງຂອງການສັງເກດຕິດຕາມຂອງຄູຄົນໜຶ່ງຕໍ່ຄວາມກ້າວໜ້າຂອງ ທ້າວ ຟັນຊິດສະໂກ ທີ່ເປັນເດັກຊາຍຊາວຕີມໍຕາເວັນອອກ ທີ່ພວມຮຽນພາສາອັງກິດ ເປັນພາສາທີ່ສອງຂອງເຂົາ..

ຟັນຊິດສະໂກ

ວັນທີ 12 ມິນາ. ຟັນຊິດສະໂກ ພວມຂຽນຊີວະປະຫວັດກ່ຽວກັບຄອບຄົວຂອງລາວ ໃນປະເທດຕີມໍ. ລາວ ຈັດລຽງຂໍ້ມູນເປັນລຳດັບຕໍ່ເນື່ອງໄດ້ດີ, ແຕ່ໄດ້ລາວໃຊ້ປະໂຫຍກກຳມະ ກ່ຽວກັບເວລາ ບໍ່ຖືກຕ້ອງ ໃນ ການຂຽນ.

ວັນທີ 16 ມິນາ. ກວດສອບ ແລະ ແກ້ໄຂການຂຽນຂອງ ຟັນຊິດສະໂກ ແລະ ນັກຮຽນອີກ 4 ຄົນ ໂດຍເນັ້ນໃສ່ການໃຊ້ປະໂຫຍກເວລາໃນອະດີດໃນການຂຽນເຫດການທີ່ຜ່ານມາ. ຟັນຊິດສະໂກ ກໍໄດ້ ກວດແກ້ຕົ້ນສະບັບທີ່ລາວຂຽນ

ວັນທີ 12 ມິນາ. ຟັນຊິດສະໂກພວມໃຊ້ປະໂຫຍກເວລາໃນອະດີດໃນບົດຂຽນຂອງລາວ ຫຼາຍ ເກີນໄປ. ມີຄວາມຈຳເປັນຕ້ອງອະທິບາຍຕື່ມເພື່ອເຮັດວຽກນີ້.

ວັນທີ 12 ມິນາ. ຟັນຊິດສະໂກ ແລະ ໂຈ ເຮັດວຽກດ້ວຍກັນໄດ້ດີ ໂດຍການນຳໃຊ້ສາລານຸກົມ ເພື່ອວິໄຈຂໍ້ເທັດຈິງ ກ່ຽວກັບ ຕີມໍຕາເວັນອອກ. ຟັນຊິດສະໂກ ຈົດບັນທຶກ ເອົາຂໍ້ມູນທີ່ສຳຄັນແບບ ສັ້ນໆ ແລະ ຖືກຕ້ອງ.

ການປະເມີນຜົນແຟ້ມບັນທຶກຜົນງານ

ເນື້ອໃນ

ວິທີການໜຶ່ງຂອງການປະເມີນຜົນແບບຕົວຈິງ ແມ່ນຕ້ອງສ້າງ ແລະ ທົບທວນເບິ່ງແຟ້ມ ບັນທຶກຜົນງານຂອງເດັກ. ແຟ້ມບັນທຶກຜົນງານເປັນ ບັນທຶກກ່ຽວກັບຂະບວນການຮຽນຮູ້ຂອງເດັກ ເຊິ່ງມີ ການບັນທຶກ ສິ່ງທີ່ເດັກໄດ້ຮຽນຮູ້ຜ່ານມາ ແລະ ໄດ້ຮຽນຮູ້ດ້ວຍວິທີໃດ. ແຟ້ມບັນທຶກຜົນງານ ຈະເຮັດໃຫ້ເດັກ ສາມາດເຂົ້າຮ່ວມໃນການປະເມີນຜົນຜົນງານຂອງຕົນເອງ. ແຟ້ມບັນທຶກຜົນງານ ຈະຕິດຕາມບາດກ້າວຂອງຄວາມກ້າວໜ້າຂອງເດັກ; ມັນຕິດຕາມເບິ່ງຜົນສຳເລັດ ຫລາຍກວ່າ ຄວາມຫຼົ້ມເຫຼວຂອງເດັກ. ຍິ່ງໄປກວ່ານັ້ນ, ແຟ້ມບັນທຶກຜົນງານຍັງຕ້ອງຕິດຕາມຕົວເດັກໄປ ເມື່ອ ເດັກຍ້າຍໄປຮຽນທີ່ອື່ນ.

ຕົວຢ່າງຂອງງານທີ່ອາດສາມາດລົງໄວ້ໃນແຟ້ມບັນທຶກຜົນງານປະກອບມີ:
ຕົວຢ່າງບົດຂຽນຕ່າງໆ ເຊັ່ນ ບົດແຕ່ງເລື່ອງ, ບົດເລົ່າເລື່ອງ ແລະ ບົດລາຍງານຕ່າງໆ; ບົດຈິນຕະ ນາພາບ, ຮູບແຕ້ມ, ແຜນທີ່ ແລະ ແຜນພູມ; ລວມທັງ ວຽກບ້ານວິຊາຄະນິດສາດ, ວຽກອື່ນໆ ທີ່ຄູໃຫ້ເຮັດ ແລະ ການຂຽນເສັ້ນ ສະແດງຕ່າງໆ. ກິດຈະກຳນອກຫຼັກສູດສຳລັບເດັກກໍສາມາດທີ່ ຈະບັນທຶກລົງໄດ້ ເຊັ່ນ ເປັນຜູ້ຮັບຜິດຊອບຢູ່ໃນຄະນະຫ້ອງ.

ທ່ານສາມາດທີ່ຈະຄັດເລືອກຕົວຢ່າງທີ່ສະແດງດ້ານໃດໜຶ່ງ ສະເພາະຂອງຜົນງານເດັກ. ທ່ານຍັງສາມາດທີ່ຈະເຊີນເດັກມາຄັດເລືອກຜົນງານຂອງຕົນ ທີ່ຕ້ອງການລົງໃສ່ແຟ້ມ ເພື່ອໃຫ້ພໍ່

ແມ່ ຫຼື ຜູ້ປົກຄອງ ເຊັ່ນຮັບຮູ້. ຈາກນັ້ນ ໃນທຸກພາກຮຽນ ຜົນງານຂອງເດັກກໍຈະສົ່ງໃຫ້ຄອບຄົວ ຂອງເດັກ ເພື່ອເບິ່ງ ແລະ ທົບທວນ.

ເມື່ອເດັກເລື່ອນຫ້ອງຂຶ້ນໄປ, ຄູອາດຈະສົ່ງຕໍ່ບາງພາກສ່ວນສະເພາະ ຂອງແຟ້ມບັນທຶກ ຜົນງານ ໃຫ້ຄູປະຈຳຫ້ອງຄົນໃໝ່. ສິ່ງດັ່ງກ່າວ ຈະຊ່ວຍໃຫ້ຄູປະຈຳຫ້ອງຄົນໃໝ່ຮູ້ຈັກ ແລະ ຄຸ້ນ ເຄີຍ ກັບພອນສະຫວັນ ແລະ ຄວາມຕ້ອງການຂອງນັກຮຽນໃໝ່.

ແຕ່ລະສິ່ງທີ່ບັນທຶກລົງແຟ້ມບັນທຶກຜົນງານ ຄວນຈະລົງວັນທີກຳກັບໄວ້ ແລະ ລົງລັກສະ ນະເນື້ອໃນຕົວຈິງຂອງແຕ່ລະອັນ. ລັກສະນະເນື້ອໃນຕົວຈິງຂອງງານ ອາດຂຽນລົງໄວ້ດັ່ງນີ້: “ນີ້ແມ່ນຊິ້ນງານ ກ່ຽວກັບການຂຽນໂດຍອິດສະຫຼະ ບໍ່ມີການຊ່ວຍເຫຼືອໃດໆ. ມີພຽງແຕ່ການໃຫ້ ຫົວຂໍ້ ແລະ ບາງຄຳສັບ ພື້ນຖານ. ກິດຈະກຳນີ້ໃຫ້ເວລາ 30 ນາທີ.”

ການໃຊ້ແຟ້ມບັນທຶກຜົນງານໃນການປະເມີນຜົນ

ສິ່ງຕ່າງໆໃນແຟ້ມບັນທຶກຄວນຈັດໃຫ້ເປັນລະບຽບຕາມລຳດັບ ເມື່ອແຟ້ມບັນທຶກຖືກຈັດຕັ້ງໄວ້ດີ, ກໍຈະເຮັດໃຫ້ຄູສາມາດປະເມີນຜົນສຳເລັດຂອງເດັກໄດ້. ການປະເມີນຜົນທີ່ເໝາະສົມ ມັກຈະມີ ການສົມທຽບ ຜົນງານທີ່ເດັກເຮັດໄດ້ໃນປັດຈຸບັນ ແລະ ທີ່ໄດ້ເຮັດຜ່ານມາ. ແຟ້ມບັນທຶກຜົນງານ ບໍ່ໄດ້ ໝາຍຄວາມວ່າ ຕ້ອງໃຊ້ເພື່ອສົມທຽບລະຫວ່າງເດັກກັບເດັກ. ມັນຖືກນຳໃຊ້ ເພື່ອສ້າງເປັນ ເອກະສານ ເພື່ອສະແດງ ກ່ຽວກັບ ການພັດທະນາຄວາມກ້າວໜ້າຂອງເດັກເປັນລາຍບຸກຄົນໃນ ໄລຍະເວລາໃດໜຶ່ງ. ການສະຫຼຸບ ຂອງຄູ ກ່ຽວກັບຜົນສຳເລັດ, ຄວາມສາມາດ, ຈຸດແຂງ, ຈຸດອ່ອນ ແລະ ຄວາມຕ້ອງການທີ່ຈຳເປັນຂອງ ເດັກ ຄວນອີງໃສ່ການພັດທະນາຢ່າງຮອບດ້ານຂອງເດັກ ດັ່ງທີ່ໄດ້ເຮັດເປັນເອກະສານເປັນເລື່ອງໆ ໃນແຟ້ມ ແລະ ຄວາມຮູ້ຂອງຄູ ກ່ຽວກັບວິທີການຮຽນຮູ້ ຂອງເດັກ.

ການໃຊ້ແຟ້ມບັນທຶກຂໍ້ມູນ ເພື່ອປະເມີນເດັກຈະສະໜອງໃຫ້ຄູມີລະບົບທີ່ສ້າງໄວ້ ສຳລັບ ການວາງແຜນການພົບປະລະຫວ່າງຄູ-ຜູ້ປົກຄອງ.ດ້ວຍການໃຊ້ແຟ້ມບັນທຶກຜົນງານເປັນພື້ນຖານ ໃນການສົນ ທະນາອະພິປາຍ, ຄູ ແລະ ພໍ່ແມ່ ຜູ້ປົກຄອງສາມາດທີ່ຈະທົບທວນເບິ່ງຄືນບັນດາ ຕົວຢ່າງທີ່ເປັນຮູບ ປະທຳຂອງຜົນງານເດັກ ແທນທີ່ຈະພະຍາຍາມໄປສົນທະນາອະພິປາຍຄວາມ ກ້າວໜ້າຂອງເດັກແບບ ນາມມະທຳ.

ກໍລະນີສຶກສາ

ການປະເມີນຜົນແບບຕັ້ງໜ້າໃນປະເທດຟີລິບປິນ, ບົດສຳພາດ ມາຣິສາ ຈ. ປາສະກວານ (Marissa J. Pascual), ຄູທີ່ມີປະສົບການສູງຈາກຊຸມຊົນຜູ້ຮຽນຮູ້ເພື່ອເດັກໆໃນຟີລິບປິນ. ພ້ອມກັນນັ້ນ ລາວຍັງເປັນ ຄູເຝິກໃຫ້ອີງການອຸຍນິເຊັບຊ່ວຍໂຄງການການສຶກສາແບບຫ້ອງຄວບ.

ຄຳຖາມ:

ທ່ານດຳເນີນການປະເມີນຜົນຢ່າງໃດ?

ທ່ານສັງລວມວຽກປະເມີນຜົນເຂົ້າໃນການຮຽນຮູ້ໃນຕໍ່ໜ້າຢ່າງໃດ?
ການປ່ຽນແປງຕ່າງໆທີ່ເປັນຈຸດສຸມ ມີຄວາມໝາຍຄືແນວໃດຕໍ່ທ່ານ?

ໂດຍປົກກະຕິ ຂ້າພະເຈົ້າຈະໃຊ້ປະໂຫຍດສູງສຸດ ໃນໄລຍະເວລາປະມານສາມອາທິດທຳອິດ ຂອງການເຂົ້າຮຽນ ເພື່ອລວບລວມຂໍ້ມູນທີ່ມີຄຸນຄ່າກ່ຽວກັບລະດັບຂອງນັກຮຽນ ໃນປັດຈຸບັນໂດຍ ຜ່ານຫຼາກຫຼາຍວິທີ

ການສັງເກດ

ຂ້າພະເຈົ້າໄດ້ຮຽນຮູ້ມາຫຼາຍປີທີ່ວ່າຂໍ້ມູນທີ່ສຳຄັນຫຼາຍຢ່າງສາມາດທີ່ຈະໄດ້ມາຈາກການ ສັງເກດແບບງ່າຍໆ. ຂໍ້ມູນທີ່ມີຄຸນຄ່ານີ້ມີປະໂຫຍດທີ່ສຸດ ເພື່ອຊ່ວຍຕັ້ງຈຸດປະສົງທີ່ເໝາະສົມ ສຳລັບລາຍບຸກຄົນ ແລະ ຄັດເລືອກກິດຈະກຳທີ່ເໝາະກັບຄວາມຕ້ອງການ ແລະ ຄວາມສາມາດ ຂອງເດັກ ໂດຍປົກກະຕິ, ຂ້າພະເຈົ້າຈະຂຽນລົງເປັນບັນຊີ ສິ່ງທີ່ຂ້າພະເຈົ້າຈຳເປັນຕ້ອງສັງເກດ ກ່ຽວກັບ ຕົວເດັກ ແລະ ກຸ່ມເດັກ ສຳລັບແຕ່ລະອາທິດ. ຈາກການຮູ້ຈັກສິ່ງທີ່ຕົນຢາກຈະເນັ້ນ ໃນ ແຕ່ລະອາທິດນັ້ນ ຈະເຮັດໃຫ້ຂ້າພະເຈົ້າສາມາດວາງແຜນກິດຈະກຳຕ່າງໆ ແລະ ຕາຕະລາງຂອງ ຕົນເພື່ອເຮັດການສັງເກດ. ການທີ່ຮູ້ວ່າຈະສັງເກດອັນໃດ ແລະ ສັງເກດເມື່ອໃດ ຈະເຮັດໃຫ້ຂ້າພະ ເຈົ້າໄດ້ເຮັດວຽກ ໃນທາງທີ່ມີລະບົບ ແລະ ມີປະສິດທິຜົນຫຼາຍຂຶ້ນ.

ໃນໄລຍະເວລາຫຼາຍອາທິດທຳອິດ,ຂ້າພະເຈົ້າເຫັນວ່າມີຄວາມສຳຄັນທີ່ຕ້ອງສັງເກດເດັກ ໃນສະຖານະ ການການອ່ານແບບຕ່າງໆ ເຊັ່ນ ການອ່ານແບບອິດສະຫຼະ ໃນໄລຍະເວລາເວລາ ອ່ານ ແບບງຽບໆ; ການອ່ານບົດວັນນະຄະດີກັບກຸ່ມໃນໄລຍະເວລາການອ່ານຮ່ວມກຸ່ມ; ການອ່ານ ປາກເປົ່າ ໃນຫ້ອງ ຫຼື ອ່ານໃຫ້ໝູ່ ຫຼື ຜູ້ໃຫຍ່ຟັງໃນຫ້ອງຮຽນ; ແລະ ການອ່ານ ເພື່ອເບິ່ງຂໍ້ມູນ ຄວາມຮູ້ສະເພາະຫົວຂໍ້ໃດໜຶ່ງ. ມັນເຮັດໃຫ້ຂ້າພະເຈົ້າ ກຳໄດ້ຂໍ້ມູນກ່ຽວກັບຄວາມສາມາດຂອງ ນັກຮຽນ ເພື່ອສ້າງຄວາມໝາຍຈາກບົດອ່ານ, ນຳໃຊ້ຍຸດທະສາດການປັບປຸງ (ເຊັ່ນ ການໃຊ້ຮູບ ພາບ ແລະ ຮ່ອງຮອຍຂອງເນື້ອຫາ, ໂຄງສ້າງປະໂຫຍກ ແລະ ການໃຊ້ຄຳສັບ/ປະໂຫຍກທົດ ແທນ) ເມື່ອພວກເຂົາປະເຊີນກັບຄຳສັບໃໝ່ ແລະ ຍາກໃນບົດ, ການກວດແກ້ຄືນດ້ວຍຕົນເອງ ແລະ ເພື່ອໃຫ້ມີ ປະຕິກິລິຍາແບບວິເຄາະວິຈານ ຕໍ່ສິ່ງທີ່ເຂົາອ່ານ.

ການສັງເກດເບື້ອງຕົ້ນເຫຼົ່ານີ້ຍັງເຮັດໃຫ້ຂ້າພະເຈົ້າເຫັນວ່າເດັກເບິ່ງການອ່ານ ແລະ ເບິ່ງ ຕົວເອງ ໃນຖານະເປັນຜູ້ອ່ານແນວໃດ. ໃນໄລຍະຕົ້ນປີ, ຂ້າພະເຈົ້າຍັງໄດ້ຂໍຮ້ອງ ໃຫ້ເຂົາຕອບ ແບບສອບຖາມທີ່ເຮັດໃຫ້ເຂົາສາມາດສະທ້ອນພາບທັດສະນະຄະຕິຂອງເຂົາຕໍ່ກັບການອ່ານລວມ ທັງການເບິ່ງຕົວເອງ ຄືແນວໃດ ໃນຖານະເປັນຜູ້ອ່ານ.

ການກວດກາແບບວິນິໄສເພື່ອປະເມີນດ້ານໄວຍະກອນ, ການສະກົດຕົວອັກສອນ, ຄຳສັບ, ກົນ ໄກຂອງການຂຽນ

ຜົນຂອງການປະເມີນເຫຼົ່ານີ້ ບວກກັບຂໍ້ມູນທີ່ຂ້າພະເຈົ້າໄດ້ຈາກການສັງເກດຊ່ອຍຂ້າພະເຈົ້າ ໃນການຕັດສິນໃຈວ່າຈະເຮັດປ່ຽນແປງອັນໃດໃນຫຼັກສູດ ເຊິ່ງຂ້າພະເຈົ້າໄດ້ກະກຽມຕັ້ງແຕ່ຕົ້ນ ເພື່ອສິດສອນໃນໄລຍະເວລາລະດູຮ້ອນ. ມັນຊ່ອຍຂ້າພະເຈົ້າກຳນົດ ບົດສອນທີ່ຂ້າພະເຈົ້າຈຳເປັນຕ້ອງສອນໝົດຫ້ອງ ຫຼື ສອນເດັກບາງກຸ່ມ ໃນສັບປະດາທີ່ຈະມາເຖິງ.

ການຂຽນແຟ້ມບັນທຶກຜົນງານໃນເດືອນທຳອິດ

ການເລີ່ມຂຽນແຟ້ມບັນທຶກຜົນງານຂອງນັກຮຽນຍັງສະໜອງຂໍ້ມູນທີ່ມີຄ່າກ່ຽວກັບຄວາມສາມາ ໃນການຂີດຂຽນຂອງພວກເຂົາ. ສິ່ງເຂົາລົງບັນທຶກເບື້ອງຕົ້ນສ່ວນໃຫຍ່ ຈະປະກອບມີຜົນງານ ໃນໄລຍະເວລາການເຮັດກິດຈະກຳການຂຽນແບບປະດິດສ້າງ ແລະ ບົດລາຍງານສັ້ນໆ ທີ່ເຂົາກະກຽມ ຫຼັງຈາກ ເຂົາເຮັດການວິໄຈສຳລັບວິຊາອື່ນໆ. ອີກເທື່ອນຶ່ງ, ສິ່ງດັ່ງກ່າວຍັງຊ່ອຍໃຫ້ຂ້າພະເຈົ້າກຳນົດບົດຮຽນທີ່ເປັນບູລິມະສິດ ລວມທັງກຳນົດການຈັດກຸ່ມນັກຮຽນ ສຳລັບສາມເດືອນທຳອິດນຳອີກ.

ໃນລະຫວ່າງສົກຮຽນ, ຂ້າພະເຈົ້າໃຊ້ປະໂຫຍດຈາກທັງສອງວິທີການປະເມີນ ຄື ການປະເມີນແບບບໍ່ເປັນທາງການ ແລະ ແບບເປັນທາງການ. ການປະເມີນແບບບໍ່ເປັນທາງການນັ້ນ ໂດຍປົກກະຕິຈະເຮັດຂຶ້ນໃນໄລຍະເວລາກິດຈະກຳໂຮງຮຽນ ແລະ ຫ້ອງຮຽນປະຈຳວັນ. ແຕ່ລະກິດຈະກຳການຮຽນ ການສອນ ທີ່ຂ້າພະເຈົ້ານຳສະເໜີ ແຕ່ລະວັນ ຈະກ່ຽວໂຍງ ກັບຂະບວນການປະເມີນຜົນຄວາມສາມາດຂອງນັກຮຽນ ເພື່ອຈະສຳເລັດກິດຈະກຳ ແລະ ປະຕິບັດໄດ້ຕາມຈຸດປະສົງ/ເປົ້າໝາຍຂອງການສອນ.

ຂ້າພະເຈົ້າຈະສັງເກດທັງຂະບວນການ ແລະ ຜົນໄດ້ຮັບຂອງການມີສ່ວນຮ່ວມ ໃນກິດຈະກຳ ຫຼື ໃນການເຮັດວຽກຕາມກິດຈະກຳທີ່ໄດ້ຮັບມອບໝາຍຂອງນັກຮຽນ. ຕົວຢ່າງ: ການເບິ່ງຜົນຂອງການເຮັດບົດເຝິກຫັດສັ້ນໆ ຫຼັງຈາກສອນບົດຮຽນນ້ອຍໆ ຈະໃຫ້ຂໍ້ຄິດແກ່ຂ້າພະເຈົ້າວ່າຈະຈຳເປັນ ຕ້ອງສອນຄືນບາງແນວຄວາມຄິດດ້ວຍວິທີການອື່ນ ຫຼືບໍ່ ຫຼື ຕ້ອງໃຫ້ເວລາເພີ່ມແກ່ເດັກ ເພື່ອເຮັດບົດເຝິກຫັດ ທີ່ກ່ຽວຂ້ອງກັບບົດຮຽນຕື່ມ. ການກວດເບິ່ງທົ່ວໄປກ່ຽວກັບການຂຽນລົງແຟ້ມບັນທຶກຂອງນັກຮຽນກໍເຮັດ ໃຫ້ຂ້າພະເຈົ້າເຫັນໄດ້ອີກວ່າ ພວກເຂົາສາມາດໃຊ້ຫຼັກໄວຍະກອນທີ່ໄດ້ຮຽນມາຖືກຫຼືບໍ່. ສິ່ງດັ່ງກ່າວ ຍັງບອກໃຫ້ຊາບຂະບວນການຕັດສິນໃຈກ່ຽວກັບປະສົບການ ຫຼື ຍຸດທະສາດການຮຽນຮູ້ຕໍ່ເນື່ອງກັນຫຼືບໍ່.

ໃນເມື່ອຄວາມຕ້ອງການ ແລະ ຄວາມສາມາດຂອງນັກຮຽນຂອງຂ້າພະເຈົ້າແຕກຕ່າງກັນ ລວມທັງ ຈັງຫວະຄວາມໄວໃນການສຳເລັດງານຂອງເຂົານັ້ນ, ມີຄວາມຈຳເປັນທີ່ຕ້ອງນຳສິ່ງເຫຼົ່ານີ້ມາ ພິຈາລະນາ ເມື່ອວາງແຜນບົດສອນ ແລະ ກິດຈະກຳຕ່າງໆ ທີ່ຂ້ອຍອາດຈະໃຫ້ປະຕິບັດໃນຫ້ອງຮຽນ. ເພື່ອສະດວກໃນການຄຸ້ມຄອງຫ້ອງຮຽນນັ້ນ, ການລົງທຶນທີ່ສຳຄັນກໍຄື ກຳນົດເບິ່ງວ່ານັກຮຽນຄົນໃດແດ່ ທີ່ມີຄວາມຕ້ອງການ ແລະ ຈຸດແຂງຄ້າຍຄືກັນ ແລ້ວຈັດກຸ່ມຕາມນັ້ນ. ການປະຕິບັດດັ່ງກ່າວ ເຮັດໃຫ້ຂ້າພະເຈົ້າສາມາດວາງແຜນປະຈຳວັນ ຫຼື ປະຈຳອາທິດມີປະສິດ

ທີ່ຜົນດີຂຶ້ນ ເຊິ່ງໃນຂະນະດຽວກັນ ກໍຕ້ອງຮັບປະກັນວ່າຄວາມຕ້ອງການຂອງເດັກ ໄດ້ຮັບການຕອບສະໜອງ.

ຂ້າພະເຈົ້າຍັງໄດ້ໃຊ້ການປະເມີນຜົນແບບເປັນທາງການໃນຫ້ອງຮຽນອີກດ້ວຍ. ວິທີດັ່ງກ່າວ ປະກອບມີບົດກວດກາ ຫຼື ບົດສອບສັ້ນໆທີ່ບໍ່ໄດ້ບອກລ່ວງໜ້າ, ກິດຈະກຳ ຫຼືໂຄງການຂອງລາຍບຸກຄົນ (ເຊັ່ນ-ການຂຽນໂຄງການ ຫຼື ບົດວິໄຈ) ແລະ ໂຄງການທີ່ເຮັດເປັນກຸ່ມ ເພື່ອປະກອບເຂົ້າໃນການສອບເສັງປະຈຳພາກຮຽນຕື່ມ.

ລະດັບຄວາມສຳເລັດຂອງນັກຮຽນ ແລະ ຜົນການຮຽນມັກຈະອີງໃສ່ການປະສົມປະສານກັນລະຫວ່າງ ການປະເມີນຜົນແບບບໍ່ເປັນທາງການ ແລະ ເປັນທາງການ ແລະ ການປະເມີນຜົນແບບເປັນໄລຍະ (ເຊັ່ນ-ປະຈຳເດືອນ/ພາກຮຽນ). ໃນແນວທາງນີ້, ການປະເມີນຜົນກໍຈະມີລັກສະນະເປັນການສະສົມ. ຂ້າພະເຈົ້າຍັງນຳເອົາຄວາມທຸ້ມເທຂອງນັກຮຽນໃນຂະບວນການຮຽນ ການສອນ ເຂົ້າມາພິຈາລະນານຳອີກ ໂດຍອີງຕາມພາວະຄວາມສາມາດຂອງເຂົາ. ແຕ່ລະພາກຮຽນ, ຂ້າພະເຈົ້າຈະສະຫຼຸບຈຸດແຂງ ແລະ ຄວາມຕ້ອງການຂອງເດັກແຕ່ລະຄົນໃນຫ້ອງ. ຂ້າພະເຈົ້າຈະວາງຈຸດປະສົງ ໃໝ່ສຳລັບພາກຮຽນທີ່ໄດ້ຮັບຜົນສຳເລັດດີ ແລະ ວາງແຜນກິດຈະກຳໃໝ່ທີ່ຈະເຮັດໃຫ້ ຂ້າພະເຈົ້າສາມາດບັນລຸຈຸດປະສົງໄດ້. ຂ້າພະເຈົ້າຍັງທົບທວນການຈັດກຸ່ມຕາມທີ່ຈຳເປັນອີກ.

ສຳລັບຂ້າພະເຈົ້າແລ້ວ, ຂະບວນການປະເມີນຜົນຈະບໍ່ສົມບູນໄດ້ໂດຍປາສະຈາກການນຳເອົາການປະກອບສ່ວນ ຂອງນັກຮຽນເຂົ້າມາຮ່ວມດ້ວຍ. ໃນຕອນທ້າຍຂອງແຕ່ລະພາກຮຽນ, ຂ້າພະເຈົ້າຈະແຈກແບບສອບຖາມການປະເມີນຜົນດ້ວຍຕົນເອງ ແກ່ພວກເຂົາເພື່ອຕອບລວມທັງ ຈັດກອງປະຊຸມໃຫຍ່ແບບລາຍບຸກຄົນ ເພື່ອປະເມີນຜົນງານປະຈຳພາກຮຽນຮ່ວມກັນ, ເບິ່ງຄືນຈຸດປະສົງເປົ້າໝາຍ ແລະ ວາງອັນໃໝ່ສຳລັບພາກຮຽນຕໍ່ໄປ. ພວກສ່ວນດັ່ງກ່າວຂອງຂະບວນການປະເມີນຜົນມີຄວາມສຳຄັນຕໍ່ຂ້າພະເຈົ້າ ຍ້ອນວ່າມັນໃຫ້ໂອກາດແກ່ຂ້າພະເຈົ້າ ເພື່ອຊ່ວຍນັກຮຽນໄດ້ຮຽນຮູ້ກ່ຽວກັບຕົວເຂົາເອງ ແລະ ຄວາມສາມາດຂອງຕົນເອງ. ສິ່ງດັ່ງກ່າວກາຍເປັນພາກສ່ວນໜຶ່ງຂອງ ພື້ນຖານການຕັ້ງຈຸດປະສົງເປົ້າໝາຍໃໝ່ ສຳລັບ ພາກຮຽນຕໍ່ໄປ. ໃນໄລຍະຂອງການປະຊຸມ, ຂ້າພະເຈົ້າ ບອກໃຫ້ນັກຮຽນຖືແຟ້ມກິດຈະກຳມາ, ປຶ້ມບັນທຶກ, ແຟ້ມບັນທຶກຜົນງານ ຫຼື ແຟ້ມການປະຊຸມສຳມະນາ ສຳລັບນັກຂຽນ ແລະ ໂຄງການອື່ນໆທີ່ເຂົາໄດ້ເຮັດໃນພາກຮຽນຜ່ານມາ.

ຕະຫຼອດໄລຍະຫຼາຍປີ, ຂ້າພະເຈົ້າໄດ້ຮຽນຮູ້ວ່າແຕ່ລະຊິ້ນເລັກໆນ້ອຍໆຂອງຂໍ້ມູນ ທີ່ຄູສາມາດເກັບກຳ ໄດ້ກ່ຽວກັບເດັກໃນແຕ່ລະໄລຍະເວລາທີ່ແຕກຕ່າງກັນພາຍໃນປີຮຽນ ບໍ່ວ່າຈະໄດ້ມາໂດຍຜ່ານວິທີການແບບບໍ່ເປັນທາງການ ແລະ ເປັນທາງການ ຈະຕ້ອງເຮັດໃຫ້ເປັນຂໍ້ມູນທີ່ຖືກຕ້ອງ ເປັນປັດຈຸບັນກ່ອນທີ່ ໃຜຜູ້ໜຶ່ງຈະຕັດສິນໃຈ ທີ່ສຳຄັນກ່ຽວກັບຫຼັກສູດ. ຕົວຢ່າງ: ການໄດ້ຄະແນນດີ ໃນການເຮັດ ບົດເຝິກຫັດໄວຍະກອນ ບໍ່ໄດ້ຄ້ຳປະກັນ ວ່າເດັກໄດ້ມີທັກສະກ່ຽວກັບສິ່ງນັ້ນແລ້ວ. ຈາກປະສົບການຂອງ ຂ້າພະເຈົ້າ, ມີຫຼາຍຕົວຢ່າງ ໃຫ້ເຫັນຄືມີເດັກທີ່ສາມາດເຮັດບົດເຝິກຫັດກ່ຽວກັບໄວຍະກອນໄດ້ຮັບ ຄະແນນສູງສຸດ ແຕ່ບໍ່ອາດສາມາດທີ່ຈະນຳໃຊ້ແນວຄວາມຄິດດັ່ງກ່າວ

ໃນເວລາຂຽນບົດແຕ່ງເລື່ອງ. ເມື່ອເວລາມີຄວາມແຕກຕ່າງກັນລະຫວ່າງເດັກ ໃນການເຮັດບົດ ເຝິກຫັດ ແລະ ໃນການແຕ່ງເລື່ອງ, ຂ້າພະເຈົ້າຄົ້ນພົບ ວ່າມັນຈະໄດ້ປະໂຫຍດ ຖ້າໃຫ້ໂອກາດ ເພີ່ມແກ່ເດັກ ໃນການແຕ່ງເລື່ອງເປັນກຸ່ມ ໂດຍມີຄູເປັນຜູ້ຄອຍ ໃຫ້ຄວາມຊ່ອຍເຫຼືອ. ການທຳ ເຊັ່ນນີ້ ເຮັດໃຫ້ຂ້າພະເຈົ້າສ້າງຕົວແບບ ຫຼື ອອກແບບ ການນຳໃຊ້ແນວຄວາມຄິດ ກ່ຽວກັບໄວ ຍະກອນສະເພາະ ເລື່ອງໃນລະຫວ່າງການຂຽນບົດແຕ່ງເລື່ອງ.

ໃນຖານະເປັນຄູ, ສິ່ງສຳຄັນສຳລັບຂ້າພະເຈົ້າ ກໍຄື ຕ້ອງສະທ້ອນເຖິງຂໍ້ມູນໃໝ່ໆ ສະເໝີ ບໍ່ວ່າຈະເປັນ ຂໍ້ມູນໃດໆກໍຕາມທີ່ໄດ້ມາກ່ຽວກັບເດັກ ຫຼື ກຸ່ມເດັກໃດໜຶ່ງໃນເວລາທີ່ແນ່ນອນ ໃດໜຶ່ງ. ຂ້າພະເຈົ້າຈະພະຍາຍາມຢູ່ສະເໝີໃນການວິເຄາະການນຳໃຊ້ຂໍ້ມູນໃໝ່. ຕົວຢ່າງ: ຖ້າມີ ການທຳຜິດທີ່ເປັນຮູບແບບອັນໄດ້ຈາກການສັງເກດການອ່ານ ຫຼື ການແຕ່ງເລື່ອງ, ມັນສາມາດ ບອກເຕືອນວ່າເດັກ ຄົນດັ່ງກ່າວ ອາດຈະໄດ້ຮັບປະໂຫຍດຈາກການສິດສອນຄືນໃໝ່ ກ່ຽວກັບ ແນວຄວາມຄິດສະເພາະ ໃດໜຶ່ງ ຫຼື ວ່າ ລາວອາດຮຽກຮ້ອງໃຫ້ຊ່ອຍ ຕິດຕາມເບິ່ງກິດຈະກຳ ຕ່າງໆເພື່ອຮຽນຮູ້ ທັກສະສະເພາະ ໃດໜຶ່ງ. ທຸກໆຂໍ້ນ ຂອງຂໍ້ມູນໃໝ່ຈະເຮັດໃຫ້ຂ້າພະເຈົ້າຄົ້ນຄິດ ກ່ຽວກັບສິ່ງທີ່ຈະສາມາດຊ່ອຍຄວາມ ຕ້ອງການຂອງນັກຮຽນຂອງຕົນ ແລະ ຈະເຮັດຢ່າງໃດ ເພື່ອ ຈະສາມາດຊ່ອຍເຂົາໄດ້ດີທີ່ສຸດ.

6.4 ການສ່ອງແສງຄືນ ແລະ ການປະເມີນຜົນ

ການສະທ້ອນກັບ/ການສ່ອງແສງເປັນອົງປະກອບທີ່ສຳຄັນ ໃນການປະເມີນຜົນການຮຽນ ຮູ້. ກ່ອນຈະໃຫ້ການສ່ອງແສງກັນນັ້ນ, ສິ່ງສຳຄັນກໍຄືຕ້ອງມີຄວາມສຳພັນທີ່ໝັ້ນຄົງ, ປອດໄພ ແລະ ໄວ້ວາງໃຈກັນ ລະຫວ່າງ ຄູ ແລະ ເດັກ.

ເດັກໆຈະໄດ້ຮັບປະໂຫຍດຈາກການມີໂອກາດໃນການສ່ອງແສງກັນແບບທາງການ ໂດຍຜ່ານການຮຽນຮູ້ ແລະ ກິດຈະກຳຕ່າງໆໃນກຸ່ມ ແລະ ໃນຫ້ອງ. ເມື່ອເລື່ອງນີ້ດຳເນີນໄປດ້ວຍ ດີ, ກໍຈະມີການປ່ຽນຈາກການທີ່ຄູເປັນຜູ້ບອກນັກຮຽນ ວ່າເຂົາເຮັດຫຍັງຜິດ ມາເປັນນັກຮຽນເບິ່ງ ກັນເອງ ວ່າເຂົາຈຳເປັນຕ້ອງປັບປຸງອັນໃດ ແລ້ວກໍນຳ ບັນຫາ ໄປສົນທະນາອະພິປາຍກັບຄູ.

ການສ່ອງແສງ ຫຼື ສະທ້ອນກັບທີ່ບໍ່ຖືກຕ້ອງ ສະແດງໃຫ້ເຫັນ ຕົວຢ່າງ: “ເປັນຫຍັງເຈົ້າຈຶ່ງ ບໍ່ປັບປຸງການສະກົດຄຳໃຫ້ຖືກຈັກເທື່ອ? ຍາມໃດເຈົ້າກໍເຮັດ/ເວົ້າຜິດຕະຫຼອດ.” ການສ່ອງແສງກັບ ໃນທາງທີ່ເປັນລົບ ຈະລົດຄວາມພາກພູມໃຈໃນຕົນເອງຂອງເດັກ ແລະ ກໍຈະບໍ່ນຳໄປສູ່ການຮຽນ ຮູ້ ທີ່ດີຂຶ້ນ.

ການສ່ອງແສງ / ການສະທ້ອນກັບທີ່ຖືກຕ້ອງ ແລະ ມີລັກສະນະສ້າງສັນສະແດງໃຫ້ເຫັນ ດັ່ງນີ້: “ສີທາ, ຄູມັກວິທີເລີ່ມບົດເລື່ອງຂອງເຈົ້າ ແລະ ຕອນລົງທ້າຍກໍໜ້າຕື່ນເຕັ້ນ. ຖ້າເຈົ້າໃຊ້ວັດ ຈະນາຈຸກົມ ເພື່ອກວດເບິ່ງບາງຄຳສັບທີ່ເຈົ້າໃຊ້ ມັນຈະຊ່ອຍເຈົ້າໃຫ້ສະກົດຄຳດີຂຶ້ນ. ຖ້າເຈົ້າບໍ່ ແນ່ໃຈກ່ຽວກັບອັກສອນຕົວທຳອິດກໍຂໍໃຫ້ຖາມທ້າວຈ໊ອ.” ການສ່ອງແສງທີ່ເປັນທາງບວກຈະຮັບຮູ້ ເຖິງຈຸດເດັ່ນ, ລະບຸໃຫ້ເຫັນຈຸດອ່ອນ ແລະ ບອກໃຫ້ຮູ້/ເຫັນວິທີທີ່ຈະສາມາດປັບປຸງໃຫ້ດີຂຶ້ນ ໂດຍ ຜ່ານການໃຫ້ຄຳຄິດເຫັນ ຕິຊົມທີ່ມີລັກສະນະສ້າງສັນ.

ຄຸນລັກສະນະຂອງການສ່ອງແສງທີ່ມີປະສິດທິຜົນ

- ການສ່ອງແສງຈະມີປະສິດທິຜົນດີ ຖ້າມັນເນັ້ນໄປທີ່ກິດຈະກຳທີ່ເຮັດ ແລະ ໃຫ້ເຮັດ ສະໝ່ຳສະເໝີໃນຂະນະທີ່ເຫັນວ່າມັນຍັງສອດຄ່ອງ ແລະ ເໝາະສົມ.
- ການສ່ອງແສງຈະມີປະສິດທິຜົນດີທີ່ສຸດ ເມື່ອເວລາມີການຢືນຢັນວ່າເດັກພວມກ້າວໜ້າໄປເລື້ອຍໆ ແລະ ເມື່ອມັນມີການກະຕຸ້ນການແກ້ໄຂສິ່ງທີ່ເຮັດຜິດ ຫຼືກະຕຸ້ນໃຫ້ມີການປັບປຸງຜົນງານໃດໜຶ່ງ.
- ຂໍ້ສະເໜີແນະ ເພື່ອການປັບປຸງຄວນເຮັດໃນລັກສະນະ “ປະຄັບປະຄອງ” ນັ້ນໝາຍຄວາມ ວ່ານັກຮຽນຕ້ອງໄດ້ຮັບການຊ່ວຍເຫຼືອເທົ່າທີ່ເປັນໄປໄດ້ ໃນການນຳໃຊ້ຄວາມຮູ້ຂອງເຂົາ. ນັກຮຽນບໍ່ຄວນໄດ້ຮັບຄຳຕອບທີ່ສົມບູນ ໃນການແກ້ບັນຫາ ໂດຍທັນທີ ໃນຂະນະທີ່ເຂົາຍັງຄິດບໍ່ອອກ ຫຼື ພວມພົບຂໍ້ຫຍຸ້ງຍາກຢູ່. ພວກເຂົາຄວນໄດ້ຮັບການຊ່ວຍເຫຼືອ ເພື່ອຄົ້ນຄິດບັນ ຫາຕ່າງໆດ້ວຍຕົວເອງໃນລັກສະນະທີ່ເປັນໄປເທື່ອລະກ້າວ.
- ຄຸນນະພາບຂອງການສົນທະນາອະພິປາຍຢູ່ໃນການສ່ອງແສງຖືເປັນສິ່ງສຳຄັນ ແລະ ການວິໄຈສ່ວນຫຼາຍກໍຊີ້ບອກວ່າ ການສ່ອງແສງໃຫ້ຄຳເຫັນແບບປາກເປົ່າ ມີປະສິດທິຜົນດີກວ່າການສ່ອງແສງແບບຂຽນ.
- ນັກຮຽນຈຳເປັນຕ້ອງມີທັກສະເພື່ອຮ້ອງຂໍການຊ່ວຍເຫຼືອ ແລະ ຮູ້ສຶກສະບາຍເປັນກັນເອງ ໃນການກະທຳດັ່ງກ່າວໃນຫ້ອງຮຽນ.

ການປະເມີນຜົນຕົນເອງ

ເດັກໆຈຳເປັນຕ້ອງ:

- ສະທ້ອນພາບຄືນຕໍ່ກັບວຽກງານຂອງຕົນເອງ
- ໄດ້ຮັບການສະໜັບສະໜູນເພື່ອຍອມຮັບບັນຫາຕ່າງໆໂດຍປາສະຈາກຄວາມສ່ຽງຕໍ່ຄວາມພາກພູມໃຈໃນຕົນເອງ.
- ໄດ້ມີເວລາເພື່ອແກ້ໄຂໂຈດບັນຫາ.

ການປະເມີນຜົນຕົນເອງຈະເກີດຂຶ້ນໄດ້ທຸກເມື່ອ ເມື່ອນັກຮຽນຕ້ອງບັນຍາຍ ຫຼື ກ່າວເຖິງຄວາມຮູ້, ຄວາມສາມາດ ຫຼື ຄວາມກ້າວໜ້າຂອງຕົນເອງ. ການປະເມີນຜົນຕົນເອງຈະກໍ່ສ້າງຄວາມຮູ້ ແລະ ຄວາມຮັກການຮຽນຮູ້. ນອກຈາກນີ້, ການປະເມີນຜົນຕົນເອງຍັງສາມາດທີ່ຈະເກີດໃນການສົນທະນາອະພິ ປາຍກັບເດັກໆ ຫຼືໃນໜັງສືຂ່າວປະຈຳວັນຂອງພວກເຂົາເອງ.

ທັນທີທີ່ເດັກສາມາດຂີດຂຽນ, ຄູຄວນບອກໃຫ້ເຂົາລົງບັນທຶກປະສົບການ ໃນການຮຽນຮູ້ຂອງເຂົາ ໃນໜັງສືຂ່າວປະຈຳວັນ. ເມື່ອກິດຈະກຳການຮຽນຮູ້ ຫຼື ໜ່ວຍວິຊາຮຽນສຳເລັດສົມບູນແລ້ວ, ທ່ານສາ ມາດທີ່ຈະບອກນັກຮຽນແຕ່ລະຄົນສະທ້ອນພາບຄືນຄວາມກ້າວໜ້າຂອງເຂົາ.

6.5 ການປະເມີນທັກສະ ແລະ ທັດສະນະຄະຕິ

ມັນເປັນການຍາກທີ່ຈະປະເມີນຫຼາຍຈຸດປະສົງເປົ້າໝາຍໃນການສຶກສາ. ແນ່ນອນທັກສະ ແລະ ທັດສະນະຄະຕິເປັນພື້ນຖານຂອງການຮຽນຮູ້ຂອງເດັກ ແລະ ການພັດທະນາໃນອະນາຄົດຂອງ ເດັກ.ຍ້ອນແນວນັ້ນ, ພວກເຮົາຈຶ່ງສົມຄວນທີ່ຕ້ອງພະຍາຍາມປະເມີນສິ່ງເຫຼົ່ານີ້ ເທົ່າທີ່ພວກເຮົາສາມາດເຮັດໄດ້. ຢູ່ຂ້າງລຸ່ມນີ້ ເປັນຕົວຢ່າງຂອງມາດຕະການທີ່ໃຊ້ເພື່ອປະເມີນ 4 ລະດັບຄວາມສຳເລັດຜົນ ດ້ານທັກສະ ແລະ ທັດສະນະຄະຕິ.

ທັກສະໂດຍທົ່ວໄປ: ການຮ່ວມມື. ການຮ່ວມມືໝາຍເຖິງຄວາມສາມາດ ໃນການຮຽນຮ່ວມກັບຜູ້ອື່ນ ແລະ ຍອມຮັບພາລະບົດບາດທີ່ຫຼາກຫຼາຍທີ່ກ່ຽວຂ້ອງກັບການຟັງ, ການອະທິບາຍ, ການເຈລະຈາ ແລະ ການປະນີປະນອມ.

	ເດັກ ກ	**ເດັກ ຂ**
ລະດັບ1: ສາມາດເຮັດວຽກຮ່ວມກັບຄູ່ຂອງຕົນໃນການປ່ຽນ ຜຽນກັນ ຟັງ, ເວົ້າ ແລະ ແລກປ່ຽນແນວຄວາມຄິດ ແລະ ຊັບພະຍາກອນ.		
ລະດັບ 2: ສາມາດຍອມຮັບ ແລະ ເຈລະຈາປະນີປະນອມ ຂໍ້ຄິດເຫັນ ແລະ ຂໍ້ວິພາກວິຈານ ທີ່ແຕກຕ່າງກັນ		
ລະດັບ 3: ສາມາດເຮັດວຽກໃນກຸ່ມແບບປະສົມປະສານ (ອາຍຸ/ ຄວາມສາມາດ/ເພດທີ່ແຕກຕ່າງ)		
ລະດັບ 4: ສາມາດນຳພາກຸ່ມແບບປະສົມປະສານສາມາດໃຫ້ ຂໍ້ສະເໜີແນະແນວທາງການແກ້ບັນຫາຕ່າງໆໂດຍໃຊ້ຍຸດທະສາດ ການຮ່ວມມື		

ທັດສະນະຄະຕິ: ຄວາມຮູ້ສຶກຮ່ວມ ຄືມີຄວາມປາຖະໜາທີ່ຈະນຶກເຖິງຄວາມຮູ້ສຶກ ແລະ ຄວາມຄິດຂອງຄົນອື່ນ.

	ເດັກ ກ	**ເດັກ ຂ**
ລະດັບ 1: ສາມາດຍອມຮັບວ່າຂໍ້ຂັດແຍ່ງໃດໜຶ່ງອາດສາມາດ ມີຫຼາຍ ກວ່າໜຶ່ງດ້ານ ສາມາດທີ່ຈະແລກປ່ຽນ ແບ່ງປັນຄວາມຮູ້ສຶກ ແລະ ອະທິບາຍ ພຶດຕິກຳຕ່າງໆໄດ້		
ລະດັບ 2: ສາມາດພັນລະນາຄວາມຮູ້ສຶກຂອງຕົວລະຄອນ ໃນເລື່ອງ ຕ່າງໆໄດ້ສາມາດຮູ້ ແລະ ໄດ້ວ່າເດັກ ຫຼືຜູ້ໃຫຍ່ຄົນອື່ນໆມີເຫດຜົນທີ່ ຕ້ອງການ ຢາກໄດ້ບາງຢ່າງທີ່ແຕກຕ່າງຈາກທ່ານ		
ລະດັບ 3: ສາມາດອະທິບາຍໄດ້ວ່າ ຄົນເຮັດສິ່ງຕ່າງໆ ບໍ່ເໝືອນກັນ ຍ້ອນມີພື້ນຖານພູມຫຼັງ ແລະ ສະຖານະພາບ ແຕກຕ່າງກັນ ສາມາດ ທີ່ຈະທົນ ກັບການໃຊ້ຄຳດູຖູກດູໝິ່ນໃນໂຮງຮຽນບົນ ພື້ນຖານ ຂອງເພດ, ຄວາມພິການ, ເຊື້ອຊາດ ຫຼືຄວາມທຸກຍາກ		

ລະດັບ4: ສາມາດທີ່ຈະທົບຕໍ່ຄຳກ່າວແບບເດີມໆຕະຫຼອດ ກ່ຽວກັບຄົນທີ່ແຕກຕ່າງຈາກຕົນເອງ		

ບັນດາກິດຈະກຳທີ່ມັກຖືກນຳໃຊ້ໃນການປະເມີນຜົນແບບຕໍ່ເນື່ອງ ແລະ ແບບຕົວຈິງຈະປະກອບດ້ວຍທັງການປະເມີນຜົນການປະຕິບັດການຮຽນຮູ້ ແລະ ຜະລິດຜົນຂອງນັກຮຽນ. ການປະເມີນການປະຕິບັດການຮຽນຮູ້ອາດຈະປະກອບດ້ວຍ: ການຄົ້ນຄວ້າສຳຫຼວດວິທະຍາສາດ; ການແກ້ໂຈດຄະນິດສາດ ໂດຍນຳໃຊ້ວັດຖຸຕົວຈິງ; ການສະແດງຟ້ອນ; ການສະແດງບົດບາດສົມມຸດກັບອີກໜຶ່ງ ຫຼື ສອງຄົນ; ການອ່ານບົດລະຄອນ; ເກມສົ່ງບານ ; ແລະ ອື່ນໆ.

ຜະລິດຜົນທີ່ສາມາດປະເມີນໄດ້ອາດປະກອບດ້ວຍ: ການວາດ ຫຼື ແຕ້ມ; ແບບຈຳລອງທີ່ກ່ຽວ ຂ້ອງກັບປະກົດການວິທະຍາສາດ; ບົດຂຽນ/ບົດຄວາມ ຫຼື ບົດລາຍງານ; ຫຼື ບົດເພງທີ່ຂຽນ ແລະ ແຕ່ງໂດຍເດັກ.

6.6 ຂໍ້ຜິດພາດທີ່ອາດສາມາດເກີດຂຶ້ນກັບການປະເມີນຜົນ

ຜົນໄດ້ຮັບອັນສຸດທ້າຍສຳລັບນັກຮຽນຄວນຈະພົວພັນກັບສິ່ງທີ່ເຂົາສາມາດເຮັດໄດ້ໃນ **ເມື່ອກ່ອນ** ແລະ ສິ່ງທີ່ເຂົາເຮັດໄດ້ໃນ **ປັດຈຸບັນ.** ບໍ່ຄວນຈະໄປກ່ຽວຂ້ອງກັບແຕ່ສະເພາະບົດກວດການສອບເສັງມາດຕະຖານ ໃນໄລຍະເວລາທ້າຍປີ. ເດັກທີ່ຢູ່ໃນກຸ່ມ ຫຼື ຫ້ອງຮຽນປີດຽວກັນອາດຈະມີຄວາມແຕກຕ່າງ
ກັນຢ່າງນ້ອຍ ສາມປີໃນເລື່ອງຂອງຄວາມສາມາດທົ່ວໄປ ລະຫວ່າງພວກເຂົາ, ແລະ ຖ້າເປັນວິຊາຄະນິດສາດ ອາດຈະມີຄວາມແຕກຕ່າງກັນໄດ້ເຖິງເຈັດປີ. ນີ້ໝາຍຄວາມວ່າ ການສົມທຽບເດັກໂດຍໃຊ້ ການກວດການ ສອບເສັງມາດຕະຖານອັນດຽວຈະບໍ່ຍຸຕິທຳຕໍ່ເດັກຈຳນວນຫຼາຍຄົນ.

ຄູ, ພໍ່ແມ່ ຫຼືຜູ້ປົກຄອງບໍ່ຄວນຈະເຫັນຫຼືຄິດວ່າການກວດການສອບເສັງທ້າຍປີ ເປັນການປະເມີນຜົນ ທີ່ສຳຄັນທີ່ສຸດເພາະເດັກມີສ່ວນກ່ຽວຂ້ອງ. ໜຶ່ງໃນແຫຼ່ງສາເຫດທີ່ໃຫຍ່ທີ່ສຸດຂອງຄວາມ ພາກພູມໃຈໃນຕົນເອງຕ່ຳໃນເດັກແມ່ນການນຳໃຊ້ການປຽບທຽບ ໂດຍສະເພາະໃນໂຮງຮຽນ. ການກວດການສອບເສັງທ້າຍປີຄວນເປັນພຽງແຕ່ໜຶ່ງອົງປະກອບຂອງການປະເມີນຜົນຄວາມກ້າວໜ້າຂອງເດັກທຸກຮອບ ແລະ ຄົບຊຸດທັງໝົດ. ການປະເມີນດັ່ງກ່າວມີຈຸດໝາຍແນໃສ່ການຍົກລະດັບຄວາມຮັບຮູ້ຂອງຄູ, ເດັກ ແລະ ພໍ່ແມ່ຫຼືຜູ້ປົກຄອງກ່ຽວກັບຄວາມສາມາດຂອງເດັກ. ນອກນີ້ຍັງຄວນໃຊ້ ເພື່ອພັດທະນາຍຸດທະສາດ ສຳລັບຄວາມກ້າວໜ້າໃນອະນາຄົດ. ພວກເຮົາບໍ່ຄວນເນັ້ນໃສ່ຈຸດບົກຜ່ອງ ຫຼື ຈຸດອ່ອນຂອງເດັກ. ດີແທ້ຄວນຈະສະຫຼອງສິ່ງທີ່ເດັກເຮັດໄດ້ ສຳເລັດຜົນ ແລະ ຕັດສິນໃຈນຳກັນວ່າ ເຮົາຈະສາມາດຊ່ອຍເຂົາຮຽນຮູ້ໃຫ້ຫຼາຍຂຶ້ນຄືແນວໃດ.

ການປະເມີນຜົນແບບຕົວຈິງ ແລະ ແບບຕໍ່ເນື່ອງສາມາດທີ່ຈະກຳນົດ/ລະບຸສິ່ງທີ່ນັກຮຽນ ພວມຮຽນຮູ້ຢູ່ລວມທັງບາງເຫດຜົນວ່າເປັນຫຍັງເດັກຈຶ່ງບໍ່ຢາກຮຽນ(ບາງຄັ້ງກຳພັນລະນາໃນແບບ“ ການຂະຫຍັກ ການຮຽນຮູ້”). ບາງເຫດຜົນເຫຼົ່ານີ້ປະກອບມີສິ່ງ ດັ່ງລຸ່ມນີ້:

- ♦ ເດັກບໍ່ໄດ້ຮຽນຮູ້ທັກສະເພື່ອຈະປະຕິບັກກິດຈະກຳ.ຫຼາຍໆກິດຈະກຳຈະມີລັກສະນະຕໍ່ເນື່ອງ ໂດຍສະເພາະໃນວິຊາຄະນິດສາດ ແລະ ພາສາ. ເດັກຈຳເປັນຕ້ອງຮຽນຮູ້ ທັກສະໜຶ່ງກ່ອນ ເຊັ່ນ - ການນັບເຖິງ 10 ກ່ອນທີ່ຈະສາມາດຮຽນລົບຈຳນວນໄດ້
- ♦ ວິທີສິດສອນບໍ່ແມ່ນວິທີທີ່ຖືກຕ້ອງສອດຄ່ອງສຳລັບເດັກ.
- ♦ ເດັກອາດຈຳເປັນຕ້ອງການເວລາເພີ່ມຕື່ມເພື່ອເຝິກປະຕິບັດສິ່ງທີ່ໄດ້ຮຽນຮູ້ມາ.
- ♦ ເດັກພວມທໍລະມານຈາກການຫິວເຂົ້າ ຫຼື ຂາດສານອາຫານ.
- ♦ ເດັກມີບັນຫາຕ່າງໆດ້ານອາລົມ/ຈິດໃຈ ຫຼື ດ້ານຮ່າງກາຍທີ່ເປັນຕົ້ນເຫດຂອງຄວາມຫຍຸ້ງຍາກໃນການຮຽນຮູ້.

ຖ້າເດັກຄົນໃດຄົນໜຶ່ງພວມມີຄວາມຫຍຸ້ງຍາກ, ການປະເມີນຜົນແບບຕໍ່ເນື່ອງ ໂດຍໃຊ້ວິທີການແບບຕົວຈິງ ອາດຈະສະແດງໃຫ້ເຫັນສິ່ງຫຍຸ້ງຍາກເຫລົ່ານີ້, ນັ້ນຈະເຮັດໃຫ້ພວກເຮົາໄດ້ໃຫ້ການຊ່ອຍເຫຼືອແກ້ໄຂເດັກທີ່ພົບຄວາມຫຍຸ້ງຍາກ. ພວກເຮົາຄວນເຂົ້າໃຈວ່າ ເດັກທຸກຄົນບໍ່ໄດ້ຮຽນຮູ້ ໃນແນວທາງດຽວກັນ ແລະ ຈັງຫວະຄວາມໄວໃນການຮຽນຮູ້ກໍບໍ່ເໝືອນກັນ. ເດັກບາງຄົນ ອາດຈະເຄີຍຂາດໂຮງຮຽນຖືກກັບລຳດັບຕອນສຳຄັນຂອງຄວາມຕໍ່ເນື່ອງໃນການຮຽນຮູ້, ການສິດສອນເພີ່ມທີ່ນຳໃຊ້ ໃນເວລາເໝາະສົມສາມາດຊ່ອຍໃຫ້ແນວທາງເດັກທີ່ພວມຫຼ້າຫຼັງໝູ່ ເພື່ອຮຽນຄວາມຮູ້ ແລະ ທັກສະ. “ຄູ່ຮ່ວມຮຽນ”, ອາດສາມາດຂໍໃຫ້ຜູ້ທີ່ຮຽນຮູ້ທັກສະໄດ້ດີ ໃນລະດັບມາດຕະຖານຊ່ອຍ ຜູ້ທີ່ຂາດໂຮງຮຽນ ຫຼື ຜູ້ທີ່ຈຳເປັນຕ້ອງເອົາໃຈໃສ່ຫຼາຍຂຶ້ນ.

ກິດຈະກຳສະທ້ອນພາບ: ການປະເມີນຄວາມກ້າວໜ້າ

ໃຫ້ທ່ານຄົ້ນຄິດກ່ຽວກັບພາກຮຽນທີ່ຜ່ານມາ. ໃຫ້ຄິດເຖິງວິຊາຮຽນວິຊາໜຶ່ງ ເຊັ່ນ ຄະນິດສາດ ຫຼື ວິທະຍາສາດ. ທ່ານໄດ້ປະເມີນຄວາມກ້າວໜ້າເດັກແນວໃດ? ໂດຍຜ່ານການສັງເກດ, ກວດກາປະຈຳ ອາທິດ, ຜະລິດສິ່ງໃດໜຶ່ງ, ແຟ້ມບັນທຶກຜົນງານ, ການສອບເສັງທ້າຍພາກຮຽນ ແລະ ອື່ນໆ?

ທ່ານຈະລາຍງານໃຫ້ພໍ່ແມ່ ຫຼື ຜູ້ປົກຄອງເດັກຢ່າງໃດ? ໂດຍຜ່ານການສົນທະນາແບບບໍ່ເປັນ ທາງການ, ບົດລາຍງານ ຫຼື ໃນກອງປະຊຸມພົບປະລະຫວ່າງຄູ - ພໍ່ແມ່ນັກຮຽນ ?

ຈາກຄວາມຮັບຮູ້ທີ່ດີສູ່ການກະທຳ. ມາຕອນນີ້ ຖືວ່າທ່ານໄດ້ຮັບຮູ້ດີຂຶ້ນຄຸນຄ່າຂອງການປະເມີນຜົນແບບຕໍ່ເນື່ອງ, ຈະມີປະຕິບັດການອັນໃດແດ່ທີ່ທ່ານສາມາດທີ່ຈະເຮັດ ເພື່ອໃຫ້ໄດ້ຮູບພາບທີ່ດີຂຶ້ນກ່ຽວກັບຈຸດແຂງ ແລະ ຈຸດອ່ອນຂອງເດັກ? ທ່ານສາມາດສ້າງຕັ້ງການປະເມີນຜົນຈາກແຟ້ມບັນທຶກຜົນງານທີ່ໂຮງຮຽນຂອງທ່ານ ຫຼື ຢ່າງໜ້ອຍໃນຫ້ອງຮຽນຂອງທ່ານໄດ້ບໍ? ໃຫ້ພະຍາຍາມສ້າງແຜນປະເມີນຜົນໝົດທັງປີ. ໃຫ້ພະຍາຍາມຄົ້ນຄິດແນວທາງຕ່າງໆທີ່ອາດສາມາດຄຸ້ມຄອງໄດ້ໃນສະພາບແວດລ້ອມຕົວຈິງຂອງທ່ານ, ກະລຸນາໃຫ້ພາບເຕັມໆ ກ່ຽວກັບ ຄວາມກ້າວໜ້າຂອງເດັກໃນໄລຍະເວລາຕະຫຼອດປີ. ຕ້ອງຈື່ຈຳໄວ້ວ່າ ການປະເມີນຜົນຄວນຖືກບັນຈຸເຂົ້າໃນການວາງແຜນການ ສອນຫົວຂໍ້ ຫຼື ບົດຮຽນຕັ້ງແຕ່ຕົ້ນ.

	ການສັງເກດ	ການປະຕິບັດ ການຮຽນຮູ້	ແຟ້ມບັນທຶກ ຜົນງານ	ການກວດກາ ແບບວິນິໄສ	ອື່ນໆ?
ປະຈຳວັນ					
ປະຈຳອາທິດ					
ປະຈຳພາກຮຽນ					
ປະຈຳປີ					

6.7 ການປະເມີນຜົນການຮຽນການສອນຢູ່ໃນຫ້ອງຮຽນມີນັກຮຽນຫລາຍຄົນ

ບົດບາດຂອງການສ່ອງແສງຄືນ.

ຄວາມຫຍຸ້ງຍາກອັນໃຫຍ່ຫລວງ ໃນການສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ນັ້ນ ແມ່ນການຊອກຫາວິທີການ ເພື່ອໃຫ້ຄວາມເຫັນຍ້ອນກັບແກ່ນັກຮຽນ ແລະ ຮັບຄວາມເຫັນ ຍ້ອນກັບ ຈາກນັກຮຽນ. ຄວາມເຫັນຍ້ອນກັບ ຊ່ວຍໃຫ້ນັກຮຽນເຫັນວ່າ ເຂົາເຈົ້າເຮັດໄດ້ດີແນວໃດ ແລະ ເຂົາເຈົ້າ ເຂົ້າໃຈບົດຮຽນທີ່ທ່ານສອນແນວໃດ. ຜົນສຸດທ້າຍ, ຖ້າທ່ານໃຫ້ຄວາມເຫັນຍ້ອນ ກັບແກ່ເຂົາເຈົ້າຫຼາຍເທົ່າໃດ ກໍຍິ່ງເປັນການດີໃຫ້ແກ່ເຂົາ, ເພາະວ່າ ມັນຈະບໍ່ພຽງແຕ່ຊ່ວຍເຂົາເຈົ້າ ເທົ່ານັ້ນ ແຕ່ຍັງເປັນການຊ່ວຍເຫຼືອທ່ານເອງອີກ. ຕົວຢ່າງ ຖາມນັກຮຽນ ກ່ຽວກັບ ສິ່ງທີ່ເຂົາເຈົ້າຄິດ ກ່ຽວກັບ ຄວາມໄວຂອງ ການບັນລະຍາຍ ແລະ ເຮັດກິດຈະກຳ: ທ່ານເຮັດໄປໄວໂພດບໍ? ການບັນລະຍາຍ ມີການກ່ຽວພັນ ກັບ ກິດຈະກຳຫຼັກແນວໃດ, ລວມທັງ ການອ່ານອັນໃດອັນໜຶ່ງ? ນັກຮຽນເຂົ້າໃຈຕົວຢ່າງ ຂອງທ່ານ ແລະ ເຂົາເຈົ້ານຳໃຊ້ ເພື່ອອະທິບາຍຈຸດທີ່ສຳຄັນແນວໃດ? ນອກຈາກເວົ້າກັບນັກຮຽນແລ້ວການເຮັດບົດເຝິກ ຫັດຂຽນຢູ່ໃນຫ້ອງຮຽນ ແລະ ກິດຈະກຳເປັນກຸ່ມ ຄືດັ່ງ ໄດ້ພັນລະນາຢູ່ໃນພາກທີ່ຜ່ານມາ, ກໍສາມາດ ສະໜອງຂໍ້ມູນຂ່າວສານເຫຼົ່ານີ້ໄດ້ເຊັ່ນດຽວ ກັນ.

ການມອບໝາຍວຽກງານໃຫ້ນັກຮຽນເຮັດ.

ວຽກງານທີ່ມອບໝາຍໃຫ້ນັກຮຽນນັ້ນ ເປັນພາຫະນະໜຶ່ງທີ່ສຳຄັນ ທີ່ຊ່ວຍນັກຮຽນໃຫ້ຮຽນ ໄດ້ສຶກສາເອົາແນວຄວາມຄິດທີ່ສຳຄັນ. ພ້ອມກັນນັ້ນ ມັນຍັງເປັນພາຫະນະເພື່ອວັດຜົນສຳເລັດ ໃນການຮຽນຂອງເຂົາ ຊຶ່ງພວກເຮົາສາມາດໃຫ້ຄວາມເຫັນຍ້ອນກັບແບບສ້າງສັນ. ໃນເວລາທີ່ມີ ນັກຮຽນຈຳນວນຫຼາຍຢູ່ໃນຫ້ອງຮຽນນັ້ນ ມັນສາມາດສ້າງຄວາມຫຍຸ້ງຍາກ ໃນການທົບທວນບົດ ຮຽນ, ໂຄງການ ຫຼື ການສອບເສັງ, ທ່ານບໍ່ຄວນຢັບຢັ້ງໃນການມອບວຽກອັນເໝາະສົມ ໃຫ້ນັກ ຮຽນ, ໂດຍສະເພາະ ວຽກງານ ການຂຽນ. ສິ່ງທີ່ໄດ້ຂຽນໄວ້ຢູ່ໃນລຸ່ມນີ້ ແມ່ນຂໍ້ສະເໜີຈຳນວນໜຶ່ງ ສຳລັບ ເຮັດໃຫ້ແນ່ໃຈວ່າການມອບໝາຍວຽກຂອງ ທ່ານ ມີຄວາມໝາຍສຳລັບທ່ານ ແລະ ສຳ ລັບນັກຮຽນ.

ໃຫ້ຄັດເລືອກວຽກມອບໝາຍທີ່ສອດຄ່ອງກັບຈຸດປະສົງ ແລະ ຜົນໄດ້ຮັບຂອງການຮຽນ. ວຽກງານ ທີ່ມອບໝາຍໃຫ້ ເປັນພາກສ່ວນໜຶ່ງສຳຄັນຂອງການວາງແຜນ ແລະ ການຮ່ຳຮຽນ, ພິເສດແມ່ນຢູ່ ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ບ່ອນທີ່ມີຄວາມຈຳເປັນເພື່ອຕິດຕາມການ ຮຽນຂອງນັກຮຽນຈຳນວນຫຼາຍ. ໃນເວລາທີ່ທ່ານອອກແບບບົດສອນ, ໃຫ້ນຳເອົາວິທີການສອນ ແບບເອົາເດັກເປັນໃຈກາງ ໂດຍເລັ່ງໃສ່ສິ່ງທີ່ນັກຮຽນຂອງທ່ານຈະເຮັດ ເພື່ອບັນລຸຈຸດປະສົງຂອງ ການຮຽນ ແລະ ຜົນໄດ້ຮັບຂອງ ການຮຽນຕາມຄວາມຕ້ອງການ. ຄຳຖາມທີ່ສຳຄັນ ເພື່ອຖາມຕົວ ທ່ານເອງມີ: ວຽກທີ່ທ່ານມອບໝາຍ ໃຫ້ນັ້ນເໝາະສົມກັບປະເພດຂອງການຮຽນ ທີ່ຕົນເອງຕ້ອງ ການຈະສອນນັກຮຽນ ຫຼື ບໍ? ວຽກທີ່ມອບ ໝາຍໃຫ້ນັ້ນເໝາະສົມກັບຮູບແບບຕ່າງໆ ຂອງການ ຮຽນທີ່ນັກຮຽນ ເຊື່ອໝັ້ນໄດ້ບໍ? ວຽກທີ່ມອບໝາຍນີ້ ຊ່ວຍໃຫ້ນັກຮຽນເຂົ້າໃຈແນວຄິດທີ່ສຳຄັນ ຫຼື ຮຽນຮູ້ຂໍ້ມູນທີ່ສຳຄັນໄດ້ບໍ? ມັນຈະຊ່ວຍນັກຮຽນ ເພື່ອບັນລຸ ຜົນໄດ້ຮັບຂອງການຮຽນ ທີ່ດີໄດ້ບໍ?

ອອກແບບວຽກງານທີ່ມອບໝາຍໃຫ້ເພື່ອເປັນການວັດຜົນ ວ່ານັກຮຽນໄດ້ຮຽນຮູ້ສິ່ງທີ່ ທ່ານ ສິດສອນ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ຄູສອນເນັ້ນໜັກ ກ່ຽວກັບການໄດ້ຄຳຕອບ ທີ່ຖືກຕ້ອງຂອງບັນຫາ, ເຮັດການວັດຜົນໂດຍໃຊ້ຄຳຖາມປິດແບບຕອບ ຖືກ-ຜິດ ຫຼື ຄຳຖາມແບບ ຫຼາຍທາງເລືອກ (ແບບປາລະໄນ) ຊຶ່ງເປັນການງ່າຍ ແລະ ໄວໃນການກວດໃຫ້ຄະແນນ. ເຖິງຢ່າງ ໃດກໍດີ, ຜົນໄດ້ຮັບຂອງການຮຽນຂອງນັກຮຽນ ຄວນກວມເອົາການພັດທະນາຄວາມສາມາດ ເພື່ອອະທິບາຍຂະບວນ ການທີ່ເຂົາເຈົ້າໄດ້ແກ້ໄຂບັນຫາ “ແນວໃດ” ບໍ່ແມ່ນພຽງແຕ່ໃຫ້ຄຳຕອບ ເທົ່ານັ້ນ. ຢູ່ໃນຫ້ອງຮຽນທີ່ມີ ນັກຮຽນຈຳນວນຫຼາຍສາມາດເຮັດໄດ້ຫຼາຍວິທີ ເຊັ່ນ ບອກໃຫ້ນັກ ຮຽນນຳເອົາບັນຫາທີ່ໄດ້ເອົາໃຫ້ເຮັດວຽກບ້ານ ທີ່ໄດ້ແກ້ໄຂແລ້ວນັ້ນມາສະແດງໃຫ້ເບິ່ງ ແລະ ເລືອກເຟັ້ນເອົາຕົວຢ່າງທີ່ດີ ເພື່ອສະແດງ ໃຫ້ທຸກຄົນໃນຫ້ອງເຫັນນຳ. ໃນເວລາສິດສອນ ທ່ານອາດຖາມອາສາສະໝັກ ເພື່ອອະທິບາຍຂະບວນການແກ້ໄຂບັນຫາ ໃຫ້ທຸກຄົນໃນຫ້ອງຮຽນ ຟັງ. ທ່ານສາມາດເອົາບັນຫາ ໃຫ້ນັກຮຽນຂອງທ່ານ ແລະ ບອກໃຫ້ເຂົາເຈົ້າເຮັດວຽກເປັນກຸ່ມເພື່ອ ສົນທະນາກ່ຽວກັບບັນຫານັ້ນ ວ່າມັນຈະສາມາດແກ້ໄຂໄດ້ແນວ ໃດ.

ໃຫ້ຈື່ຈຳໄວ້ວ່າ: ມີນັກຮຽນຫຼາຍຄົນສາມາດແກ້ໄຂບັນຫາໄດ້, ແຕ່ວ່າ ທ່ານຄວນ ໃຫ້ເຂົາ ເຈົ້າ ຮູ້ຈັກວ່າ ເປັນຫຍັງເຂົາຈຶ່ງໄດ້ຄຳຕອບສະເພາະໃດໜຶ່ງ, ບໍ່ແມ່ນແຕ່ພຽງວ່າແນວໃດ. ນີ້ມັນ ແມ່ນການ ພິສູດອັນຖືກຕ້ອງ ຂອງການຮຽນວິຊາໃດວິຊາໜຶ່ງ.

ໃຫ້ຂໍ້ແນະນຳອັນຈະແຈ້ງສຳລັບວຽກງານທີ່ມອບໝາຍໃຫ້. ໃນເວລາທີ່ທ່ານເປັນນັກຮຽນ, ທ່ານ ເຄີຍເວົ້າກັບຕົວເອງບໍ່ວ່າ “ຂ້ອຍບໍ່ເຂົ້າໃຈໃນສິ່ງທີ່ຄູຕ້ອງການຢາກເຮັດ ໃນວຽກທີ່ຄູໄດ້ມອບໝາຍ ໃຫ້?“ ຂ້ອຍຄິດວ່ານັກຮຽນຫຼາຍຄົນກໍມີຄືກັນນີ້. ສະນັ້ນ ເພື່ອຢາກໃຫ້ໄດ້ຂໍ້ມູນຍ້ອນກັບທີ່ດີ, ພວກເຮົາຕ້ອງກຳນົດວຽກທີ່ພວກເຮົາເອົາໃຫ້ນັກຮຽນຢ່າງຈະແຈ້ງ ເພື່ອພວກເຮົາຈະຮູ້ວ່າອັນໃດ ຄືຄາດໝາຍທີ່ຢາກໄດ້ຈາກເຂົາເຈົ້າ. ຄູສອນຈຳນວນໜຶ່ງມອບວຽກງານແບບປາກເປົ່າໃຫ້ນັກຮຽນ ໃນຕອນທ້າຍຂອງມື້ຮຽນໃຫ້ເປັນວຽກບ້ານ. ແຕ່ໂຊກບໍ່ດີ ບໍ່ແມ່ນນັກຮຽນທັງໝົດໃນຫ້ອງໄດ້ຍິນ

ຫຼືໄດ້ຍິນໝົດທຸກຢ່າງ ກ່ຽວກັບວຽກງານທີ່ຄູມອບໃຫ້ ຫຼື ວ່າເຂົາເຈົ້າອາດບໍ່ມີເວລາ ເພື່ອຈົດກ່າຍ ໃສ່ປຶ້ມຂຽນ. ຈະເປັນວຽກທີ່ມອບໃຫ້ເຮັດໃນຫ້ອງ ຫຼື ເປັນວຽກບ້ານກໍດີ ຍຸດທະສາດທີ່ດີທີ່ສຸດ ແມ່ນເອົາເຈ້ຍຫົວຂໍ້ວຽກໃຫ້ ຫຼື ອາດເປັນເຈ້ຍຄູ່ມືໃຫ້ ບໍ່ຄວນຂຽນໃສ່ກະດານດຳ (ເນື່ອງຈາກວ່າ ມັນສາມາດລຶບອອກໄດ້ໄວ). ອີກດ້ານໜຶ່ງ, ແຜ່ນເຈ້ຍນັ້ນຈະຊ່ວຍນັກຮຽນ. ເນື່ອງຈາກວ່າເຂົາ ເຈົ້າຮູ້ຢ່າງຖືກຕ້ອງວ່າຄວນເຮັດອັນໃດ ເມື່ອເວລາເຂົາກັບໄປເຮືອນ ຫຼື ໃນເວລາຮຽນຢູ່ໃນຫ້ອງ ຮຽນ ພ້ອມນັ້ນ ມັນກໍສາມາດຊ່ວຍເຫຼືອທ່ານໄດ້ເຊັ່ນດຽວກັນ. ມັນຈະບັງຄັບໃຫ້ທ່ານຄິ້ນຄິດແຕ່ ລະແງ່ ແຕ່ລະມຸມຂອງການມອບວຽກໃຫ້ນັກຮຽນ ກ່ອນທ່ານຈະແລກປ່ຽນ ສິ່ງດັ່ງກ່າວກັບເຂົາ. ສິ່ງເຫຼົ່ານີ້ ຈະເຮັດໃຫ້ທ່ານ ອອກແບບວຽກທີ່ມອບໝາຍໃຫ້ ທີ່ຈະວັດແທກຄວາມຮູ້ ແລະ ທັດສະ ນະທີ່ທ່ານຕ້ອງການວັດແທກ. ໃຫ້ແນ່ໃຈວ່າ ທ່ານໄດ້ສົນທະນາເລື່ອງເຈ້ຍວຽກນັ້ນຮ່ວມກັບ ນັກ ຮຽນ. ອັນນີ້ ແມ່ນໄດ້ໃຊ້ເວລາ ເນື່ອງຈາກວ່າມັນຈະຫລີກລ້ຽງຄວາມສັບສົນ ແລະ ຄວາມຕຶງຄຽດ ຂອງນັກຮຽນ. ຄຳຖາມທີ່ນັກຮຽນຕັ້ງຂຶ້ນໃນເວລາສົນທະນາກ່ຽວກັບວຽກທີ່ມອບໝາຍ ໃຫ້ນັ້ນຈະ ຊ່ວຍເຂົາເຈົ້າໃນການເລີ່ມຕົ້ນຈັດຂອບເຂດວຽກງານໄດ້. ທ່ານສາມາດນຳໃຊ້ເວລານີ້ ເພື່ອຄາດ ຄະເນບັນ ຫາ ແລະ ວິທີທາງ ເພື່ອຫຼີກລ່ຽງບັນຫານັ້ນໄປພ້ອມໆກັນ.

ໃຫ້ໂອກາດແກ່ນັກຮຽນເພື່ອໃຫ້ເຂົາເຈົ້າໄດ້ສະແດງໃຫ້ເຫັນສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້. ການໃຫ້ ໂອກາດແກ່ນັກຮຽນຫຼາຍໆຢ່າງ ເພື່ອໃຫ້ເຂົາເຈົ້າໄດ້ສະແດງໃຫ້ເຫັນ ສິ່ງທີ່ເຂົາເຈົ້າໄດ້ຮຽນມາຈະ ເຮັດໃຫ້ທ່ານໄດ້ເຫັນມະໂນພາບ ຂອງຜົນສຳເລັດຂອງການຮ່ຳຮຽນ ທີ່ຊັດເຈນກວ່າເກົ່າ ແລະ ເປັນພື້ນຖານສຳລັບການໃຫ້ຂໍ້ມູນຍ້ອນກັບ. ເຖິງຢ່າງໃດກໍດີ, ມັນກໍມີຄວາມສຳຄັນ ທີ່ນຳໃຊ້ວິທີ ການຫຼາຍໆແບບ ເຊັ່ນ ໃຫ້ນັກຮຽນເຮັດໂຄງການ, ນຳສະເໜີເປັນກຸ່ມ, ເຮັດກວດກາໃສ່ເຈ້ຍ, ການສອບເສັງ ແລະການມອບໃຫ້ເຮັດວຽກແບບຕ່າງໆ ທີ່ມີສາຍກ່ຽວພັນຢ່າງໃກ້ຊິດກັບຜົນໄດ້ ຮັບຂອງນັກຮຽນ. ຍິ່ງໄປກວ່ານັ້ນ ການວິໃຈໄດ້ຊີ້ໃຫ້ເຫັນວ່າ ນັກຮຽນມີຄວາມກະຕຸ້ນຢາກຮຽນ ຍ້ອນການສົ່ງຂ່າວຍ້ອນກັບຢ່າງສ້າງສັນ ແລະ ໃຫ້ເຫັນຫຼັກຖານຂອງຄວາມຄືບໜ້າຂອງການຮຽນ ຂອງເຂົາເຈົ້າ. ນັກຮຽນຕ້ອງການຢາກຮູ້ວ່າ ເຂົາເຈົ້າເຮັດອັນໃດໄດ້ດີ ແລະ ພ້ອມກັນນັ້ນ ກໍຢາກຮູ້ ວ່າ ເຂົາເຈົ້າຕ້ອງການປັບປຸງອັນໃດ. ມັນມີຄວາມສຳຄັນທີ່ຕ້ອງສັນລະເສີນຈຸດແຂງຂອງເຂົາເຈົ້າ ແລະ ຊີ້ໃຫ້ເຫັນຢ່າງສ້າງສັນ ແລະ ໃຫ້ການຊ່ວຍເຫຼືອເທົ່າທີ່ຈະເປັນໄປໄດ້ ກ່ຽວກັບ ຈຸດອ່ອນຂອງ ເຂົາເຈົ້າ.

ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ, ມັນມີຄວາມຫຍຸ້ງຍາກຫຼາຍທີ່ສຸດທີ່ຈະໃຫ້ການ ສົ່ງຂ່າວຍ້ອນກັບແກ່ນັກຮຽນເປັນລາຍບຸກຄົນ. ເພື່ອກຳນົດວ່ານັກຮຽນຜູ້ໃດຕ້ອງການ ການສົ່ງ ຂ່າວເປັນລັກສະນະສ່ວນຕົວ ແລະ ເພື່ອຄຸ້ມຄອງວຽກງານທີ່ຂຽນໃສ່ເຈ້ຍຢູ່ໃນຫ້ອງຮຽນທີ່ມີນັກ ຮຽນຈຳນວນຫຼາຍ, ມີຄູຫຼາຍຄົນນຳໃຊ້ວິທີ “ເຮັດແຟ້ມສະສົມຜົນງານ”. ແຟ້ມສະສົມຜົນງານ ເຮັດດ້ວຍເຈ້ຍແຂງ ເຊັ່ນ ເຈ້ຍສີນ້ຳຕານທີ່ໃຊ້ເຮັດຊອງຈົດໝາຍ, ສາມາດບັນຈຸບັນດາ ຕົວຢ່າງ ຂອງວຽກນັກຮຽນທີ່ໄດ້ມອບໝາຍ ໃຫ້ເຊັ່ນບົດຂຽນສັ້ນໆ, ນິທານ, ບົດລາຍງານ, ບົດປະກອບ ຕົວຢ່າງ, ຮູບພາບ, ແຜນທີ່ ແລະ ແຜນວາດ ກໍຄືເຈ້ຍບົດຝຶກຫັດຄະນິດສາດ, ວຽກງານມອບໝາຍ

ອື່ນໆ ແລະ ເສັ້ນກຣາຟິກ. ວຽກງານກິດຈະກຳ ນອກຫຼັກສູດຂອງນັກຮຽນ ກໍສາມາດເຮັດການບັນທຶກເຊັ່ນດຽວກັນ ເຊັ່ນ ຄວາມຮັບຜິດຊອບກິດຈະກຳ ຢູ່ໃນຫ້ອງຮຽນ. ເອກະສານຕ່າງໆ ຢູ່ໃນແຟ້ມສະສົມຜົນງານໄດ້ຖືກຈັດຢູ່ໃນລະດັບກ່ອນ ແລະ ຫຼັງ, ໂດຍຂຽນວັນທີ ແລະ ເນື້ອເລື່ອງທີ່ໄດ້ຜະລິດໃສ່ລາຍງານແຕ່ລະອັນ, ຕົວຢ່າງ ບໍລິບົດອາດເປັນ *"ແຜ່ນເຈ້ຍຂຽນທີ່ບໍ່ເປັນປະໂຫຍດ. ມີພຽງແຕ່ຫົວຂໍ້ ແລະ ຄຳສັບພື້ນຖານຈຳນວນໜຶ່ງ. ໃຫ້ເວລາ ສາມສິບນາທີເພື່ອເຮັດວຽກນີ້"*. ດັ່ງນັ້ນ ແຟ້ມສະສົມເອກະສານ ຈຶ່ງເປັນການບັນທຶກຂະບວນການ ການຮ່ຳຮຽນຂອງນັກຮຽນ ເປັນສິ່ງທີ່ນັກຮຽນໄດ້ຮຽນຮູ້ ແລະ ເຂົາເຈົ້າຮຽນຮູ້ໄດ້ແນວໃດ. ມັນຊຸກຍູ້ ໄດ້ໃຫ້ນັກຮຽນໄດ້ຮັບຜົນສຳເລັດຫຼາຍກວ່າທີ່ຈະຫລົ້ມເຫຼວໃນການຮຽນ. ອີກເທື່ອໜຶ່ງ ແຟ້ມສະສົມຜົນງານແມ່ນໄດ້ຖືກຈັດສັນ, ທ່ານ ແລະ ນັກຮຽນສາມາດປະເມີນຜົນ ຜົນສຳເລັດຂອງການຮຽນຂອງພວກນັກຮຽນ. ຢ່າງໜ້ອຍໃນທຸກໆພາກຮຽນ ຫຼື ທຸກໆຫົກເດືອນ ຄວນເຮັດການທົບທວນວຽກງານ ທັງໝົດສອງຄັ້ງ ເພື່ອກຳນົດວ່າແມ່ນ ນັກຮຽນຜູ້ໃດທີ່ຕ້ອງການຄວາມເອົາໃຈໃສ່ເປັນລາຍບຸກຄົນ ແລະ ຢູ່ໃນວິຊາອັນໃດ. ໃຫ້ຖາມນັກຮຽນວ່າ ແມ່ນວິທີໃດທີ່ເຂົາຮຽນໄດ້ດີທີ່ສຸດ ແລະ ໃຫ້ຕັດສິນໃຈວ່າມີກິດຈະກຳເພີ່ມເຕີມອັນໃດອີກ ທີ່ນັກຮຽນສາມາດເຮັດໄດ້ ເພື່ອການປັບປຸງການຮຽນຂອງເຂົາເຈົ້າ.

ການຈັດການກວດກາສອບເສັງ.

ວິທີການວັດແທກຜົນສຳເລັດຂອງການຮຽນຂອງນັກຮຽນທີ່ນິຍົມກັນຫຼາຍທີ່ສຸດ ອາດແມ່ນການເຮັດການສອບເສັງ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ຄູສອນ ແລະ ນັກຮຽນ ເບິ່ງຄືກັບວ່າເຂົາມີ ຄວາມຢ້ານກົວຕໍ່ການສອບເສັງ. ນັກຮຽນມີຄວາມກັງວົນໃນການເຮັດການສອບເສັງ ແລະ ຢ້ານເສັງຕົກ, ຄູສອນມີຄວາມຢ້ານກັງວົນ ໃນການກວດໃຫ້ຄະແນນ.

ການສອບເສັງສາມາດເປັນແບບປາລະໄນ (ການສອບແບບເລືອກຄຳຕອບ) ແລະ ການສອບເສັງແບບອັດຕະໄນ (ການສອບແບບຂຽນບົດບັນລະຍາຍ) ຫຼືວ່າ ເຮັດແບບປະສົມປະສານກັນທັງສອງຢ່າງ. ເຖິງຢ່າງໃດກໍດີ, ໃນຫຼາຍໆກໍລະນີ ການສອບເສັງນັ້ນອາດຈະບໍ່ສາມາດບອກທ່ານຢ່າງແທ້ຈິງວ່າ ນັກຮຽນຮຽນຮູ້ໄດ້ຢ່າງແທ້ຈິງ ແລະ ສາມາດນຳໃຊ້ຄວາມຮູ້ທີ່ທ່ານໄດ້ສິດສອນຫຼືບໍ່, ໂດຍສະເພາະ ແມ່ນໃນກໍລະນີການສອບເສັງແບບເລືອກຄຳຕອບ ຫຼື ແບບໝາຍຖືກ-ຜິດຊຶ່ງມັນພົວພັນກັບຄວາມຈື່ຈຳ ສ່ວນໃຫຍ່ຫຼາຍກວ່າການນຳໃຊ້. ຂະບວນການສອບເສັງສາມາດໄດ້ຮັບການປັບປຸງແນວໃດ? ໃນນີ້ມີ ທາງເລືອກຈຳນວນໜຶ່ງ. ທ່ານສາມາດຄົ້ນຄິດໄດ້ຫຼາຍກວ່ານີ້ ບໍ?

ໃຫ້ປະດິດສ້າງການສອບເສັງທີ່ເບິ່ງຄືກັນກັບນັກຮຽນມີຄວາມຄຸ້ນເຄີຍ. ການເຮັດຄືແນວນີ້ ສາມາດຊ່ວຍ ບັນເທົາຄວາມກັງວົນຕໍ່ການສອບເສັງ ຊຶ່ງນັກຮຽນຈຳນວນຫຼາຍມີປະສົບການຜ່ານມາ. ຄຳຖາມ ຂອງການສອບເສັງຄວນເປັນຮູບແບບດຽວກັນກັບສິ່ງທີ່ທ່ານໄດ້ໃຊ້ ເຮັດຄຳຖາມກວດກາ, ໃຫ້ວຽກບ້ານ, ເຮັດບັນລະຍາຍ ຫຼື ໄດ້ສົນທະນາມາກ່ອນແລ້ວນັ້ນ. ເມື່ອເວລານັກຮຽນສາມາດເຫັນສາຍກ່ຽວພັນ ລະຫວ່າງ ສິ່ງທີ່ເຂົາເຈົ້າຖືກບອກໃຫ້ເຮັດໃນເວລາຮຽນຢູ່ໃນຫ້ອງ ແລະ

ໃນເວລາຮຽນສ່ວນຕົວ ກັບສິ່ງທີ່ ເຂົາເຈົ້າໄດ້ຖືກບອກໃຫ້ເຮັດໃນເວລາສອບເສັງ, ເຂົາເຈົ້າກໍຈະຖືກກະຕຸ້ນ ເກີດໃຫ້ມີຄວາມພະຍາຍາມ ເພີ່ມຂຶ້ນ.

ໃຫ້ດຳເນີນການທົບທວນຄືນ. ເມື່ອເວລາສອບເສັງຫຍັບໃກ້ເຂົ້າມາ ໃຫ້ຢຸດເຊົາການສອນ ໃນຫ້ອງຮຽນ ເພື່ອໃຊ້ເວລາເຮັດການທົບທວນບົດຮຽນຄືນ, ຈະເຮັດການທົບທວນກັບນັກຮຽນທັງໝົດໃນຫ້ອງ ຫຼື ຈັດເປັນກຸ່ມ ກໍໄດ້. ສາມາດໃຊ້ເວລາໜຶ່ງສ່ວນສາມເພື່ອເຮັດການບັນລະຍາຍ ສັ້ນໆ ທີ່ເນັ້ນຈຸດ ສຳຄັນ ຂອງຫົວຂໍ້ ແລະ ແລ້ວຈຶ່ງເວລາທີ່ເຫຼືອໄວ້ໃຫ້ນັກຮຽນຕັ້ງຄຳຖາມ ຫຼື ເຮັດພາກປະຕິບັດ"ສັ້ນໆ. ການເຮັດທົບທວນນີ້ຈະເປັນການເບິ່ງຄືນ ໃນສິ່ງທີ່ນັກຮຽນໄດ້ຮ່ຳຮຽນອັນແທ້ຈິງ, ແລະ ມັນຈະຊ່ວຍ ທ່ານ ອອກແບບການສອບເສັງທີ່ມີປະສິດທິຜົນຂຶ້ນ ຊຶ່ງສະແດງໃຫ້ເຫັນການຮ່ຳຮຽນນັ້ນ.

ເຮັດການສອບເສັງທີ່ສະແດງໃຫ້ເຫັນຜົນສຳເລັດຂອງການຮ່ຳຮຽນ. ໂດຍສົມທົບກັບການສອບເສັງແບບ ເລືອກຫຼາຍຄຳຕອບ ໃຫ້ພະຍາຍາມເລືອກເອົາໜຶ່ງ ຫຼື ຫຼາຍແບບຕໍ່ໄປນີ້ ເພື່ອຈະເຫັນວ່ານັກຮຽນ ສາມາດນຳໃຊ້ສິ່ງທີ່ເຂົາຮຽນຮູ້ໄດ້ ຫຼືບໍ່.

- ເພີ່ມເຕີມຄຳຖາມສອບເສັງສັ້ນໆໃສ່ຕື່ມ: ຄວບຄຸມຄວາມຍາວຂອງຄຳຕອບ ໂດຍຈຶ່ງບ່ອນຫວ່າງເປົ່າແກ່ນັກຮຽນເພື່ອຕອບຄຳຖາມ (ບ່ອນຕອບຄຳຖາມ). ເຊັ່ນວ່າ ຖ້າມີບ່ອນວ່າງໜ້ອຍ ນັກຮຽນກໍຈະຕ້ອງຊອກຫາຈຸດທີ່ສຳຄັນ ເພື່ອຕອບ. ການກວດຄຳຕອບສີ່ແຖວຂອງນັກຮຽນ 60 ຄົນ ຈະງ່າຍກວ່າ ການກວດຄຳຕອບເຕັມໜ້າເຈ້ຍ ຫຼື ເຄິ່ງໜ້າເຈ້ຍຂອງນັກຮຽນ 60 ຄົນ.
- ບອກໃຫ້ນັກຮຽນຕອບຄຳຖາມໂດຍໃຊ້ແຜນວາດ, ແຜນພູມ ຫຼື ເປັນຮູບ. ການເຮັດແບບນີ້ ແມ່ນສັ້ນ ແລະ ກວດໃຫ້ຄະແນນງ່າຍ. ແຕ່ມັນສາມາດໃຫ້ຄວາມຮູ້ຫຼາຍ ກ່ຽວກັບທັກສະການ ວິເຄາະຂອງນັກຮຽນ.
- ສຳລັບຄຳຖາມແບບເລືອກຫຼາຍຄຳຕອບ, ບອກໃຫ້ນັກຮຽນເລືອກເອົາຄຳຕອບທີ່ຖືກຕ້ອງແລ້ວ ໃຫ້ອະທິບາຍໜຶ່ງ ຫຼື ສອງແຖວວ່າເຂົາໄດ້ຄຳຕອບແນວໃດ.
- ເຮັດການສອບເສັງເປັນກຸ່ມ. ຄະແນນຄືກັນອາດຈະໄດ້ເອົາໃຫ້ສະມາຊິກຂອງກຸ່ມທຸກຄົນ ໂດຍອີງຕາມ "ຜົນຜະລິດຂອງກຸ່ມ" ທີ່ເຂົາເຈົ້າຜະລິດອອກມາ. ສຳລັບເປັນລາຍບຸກຄົນ, ບອກໃຫ້ສະມາຊິກຂອງກຸ່ມ ໃຫ້ຄະແນນແຕ່ລະຄົນແບບປິດລັບ, ແລ້ວໃຫ້ຄ່າສະເລ່ຍຂອງຄະແນນກຸ່ມ ໃຫ້ນັກຮຽນແຕ່ລະຄົນ.
- ເຮັດກິດຈະກຳແບບຂຽນ, ນັກຮຽນຊອກຫາຄຳຖາມ ແລະ ຄຳຕອບ ການສອບເສັງດ້ວຍຕົວ ເຂົາເອງ ໂດຍອີງຕາມກິດຈະກຳ ແລະ ການບັນລະຍາຍຂອງທ່ານ ທີ່ເຮັດຢູ່ໃນຫ້ອງຮຽນ. ບັນດາລາຍການນີ້ ສາມາດນຳໃຊ້ເປັນການທົດສອບຕົວຈິງ, ນັກຮຽນອາດຈະເຂົ້າໃຈຄຳຖາມ ແລະ ຄຳຕອບດີກວ່າຄຳຖາມທີ່ທ່ານສ້າງຂຶ້ນ.

ຍອມຮັບວ່າບໍ່ມີການສອບເສັງໃດຈະສົມບູນແບບ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍຄົນ ແລະ ມີຄວາມຫຼາກຫຼາຍທາງດ້ານວິທີການຮ່ຳຮຽນ, ຍຸດທະສາດຂອງ "ການສອບເສັງອັນໜຶ່ງ ໃຫ້ເໝາະກັບໝົດທຸກຄົນ" ບໍ່ອາດເຮັດໄດ້ດີ. ມັນອາດມີຄຳຖາມຈຳນວນໜຶ່ງຢູ່ ໃນບົດສອບເສັງ ທີ່ອາດ ເປັນບັນຫາ ແກ່ນັກຮຽນບຸກຄົນໃດໜຶ່ງ, ນັກຮຽນຈຳນວນຫຼາຍ ຫຼື ນັກຮຽນທັງໝົດໃນຫ້ອງ. ການວິໄຈໄດ້ຊີ້ບອກວ່ານັກຮຽນມີຄວາມພໍໃຈກັບການສອບເສັງແບບປາລະໄນຫຼາຍກວ່າ ຖ້າຫາກ ເຂົາໄດ້ມີຄວາມເຫັນ ກ່ຽວກັບ ຄວາມເປັນທຳຂອງຄຳຖາມ. ຢູ່ໃນບົດສອບເສັງໃຫ້ຈົ່ງບ່ອນວ່າງໄວ້ ເພື່ອໃຫ້ນັກຮຽນທີ່ໃຫຍ່ກວ່າ ໄດ້ປະກອບຄຳເຫັນກ່ຽວກັບລາຍການຄຳຖາມຈຳນວນໜຶ່ງ. ຖ້າຫາກ ວ່າຄຳເຫັນນັ້ນຊີ້ໃຫ້ເຫັນວ່າ ນັກຮຽນເຂົ້າໃຈປຶ້ມບົດຮຽນ, ແຕ່ບໍ່ເຂົ້າໃຈຄຳຖາມ (ອາດເປັນການຕັ້ງ ຄຳຖາມບໍ່ດີ) ແລ້ວນັກຮຽນສາມາດ ໄດ້ຮັບຄະແນນເພີ່ມສຳລັບລາຍການຄຳຖາມນັ້ນ. ທ່ານສາ ມາດນຳໃຊ້ວິທີການແນວນີ້ ເພື່ອຍອມຮັບລາຍການ/ຄຳຖາມຂອງການສອບເສັງ ທີ່ເປັນບັນຫາ ໃຫ້ນັກຮຽນຈຳນວນຫຼາຍ ຫຼື ໝົດຫ້ອງຮຽນ. ສຳລັບນັກຮຽນພວກທີ່ນ້ອຍກວ່າ ກໍໃຫ້ເກັບຮັກສາ ຄະແນນຂອງລາຍການທີ່ນັກຮຽນສ່ວນຫຼາຍຕອບຜິດເລື້ອຍໆ. ສຳລັບຄຳຖາມເຫຼົ່ານີ້, ຖ້າຫາກມີ ບັນຫາເລື່ອງການໃຊ້ຖ້ອຍຄຳບໍ່ດີກໍໃຫ້ລຶບຂ້າລາຍການນັ້ນອອກ. ຖ້າຫາກມາຈາກຄວາມເຂົ້າໃຈ ຜິດທ່ານອາດຈຳເປັນຕ້ອງໄດ້ສອນເລື່ອງທີ່ທ່ານໄດ້ເຮັດ ການສອບເສັງນັ້ນຄືນໃໝ່.

ການໃຫ້ຄະແນນວຽກທີ່ມອບໝາຍ ແລະ ຄະແນນການສອບເສັງ.

ໃຫ້ການສົ່ງຂ່າວຢ້ອນກັບກ່ຽວກັບວຽກທີ່ມອບໝາຍ ໃຫ້ທັນທີທັນໃດ. ຢູ່ໃນຫ້ອງຮຽນທີ່ມີ ນັກຮຽນ ຈຳນວນຫຼາຍ, ສ່ວນຫລາຍ ຄູສອນຈະບໍ່ມີເວລາຈະກວດໃຫ້ຄະແນນວຽກບ້ານທີ່ມອບ ໝາຍໃຫ້ນັກຮຽນຫຼາຍກວ່າ 60 ຄົນ ຄືດັ່ງໄດ້ສະເໜີກ່ອນໜ້ານີ້. ວິທີໜຶ່ງ ເພື່ອຫຼຸດຜ່ອນຈຳນວນ ວຽກທີ່ມອບໝາຍໃຫ້ ເພື່ອຈະກວດໃຫ້ຄະແນນນັ້ນຈະຕ້ອງໃຫ້ນັກຮຽນເຮັດວຽກຢູ່ໃນກຸ່ມ, ການ ກວດ ໃຫ້ຄະແນນວຽກ 10 ອັນ ຈະງ່າຍກວ່າກວດໃຫ້ຄະແນນ 60 ອັນ. ມີວິທີອັນອື່ນອີກ ແມ່ນ ມອບວຽກທີ່ສັ້ນໃຫ້ນັກຮຽນເຮັດຢູ່ໃນຫ້ອງຮຽນເປັນລາຍບຸກຄົນ. ເມື່ອເວລາເຂົາເຈົ້າເຮັດສຳເລັດ ແລ້ວ ກໍບອກເຂົາເຈົ້າເອົາມາໃຫ້ທ່ານ. ທ່ານສາມາດກວດໃຫ້ຄະແນນວຽກນັ້ນທັນທີ ແລະ ກໍໃຫ້ ຄວາມເຫັນຢ້ອນກັບແກ່ເຂົາເຈົ້າໃນທັນໃດ. ຄຳຕອບອັນໄວນີ້ຮັບປະກັນໃຫ້ນັກຮຽນຂອງທ່ານຄົ້ນ ຄິດຕະຫຼອດກ່ຽວກັບວຽກທີ່ມອບໝາຍໃຫ້. ດັ່ງນັ້ນ ຄຳເຫັນຢ້ອນກັບຂອງທ່ານ ຈະມີຜົນສະທ້ອນ ທີ່ມີຄວາມໝາຍ.

ຍິ່ງໄປກວ່ານັ້ນ, ການມີຄຳເຫັນຢ້ອນກັບທັນທີທັນໃດຊີ້ໃຫ້ນັກຮຽນເຫັນເຖິງຄວາມສຳຄັນ ຂອງສິ່ງທີ່ເຂົາເຈົ້າກຳລັງຮ່ຳຮຽນ ແລະ ສິ່ງທີ່ທ່ານມີຄວາມເປັນຫ່ວງກ່ຽວກັບເລື່ອງທີ່ວ່າເຂົາເຈົ້າ ຮຽນບົດຮຽນໄດ້ດີແນວໃດ. ເພື່ອຫຼີກເວັ້ນການຍືນລຽນເປັນແຖວຢູ່ຕໍ່ໜ້າໂຕະຂອງທ່ານ, ໃຫ້ບອກ ນັກຮຽນເອົາບັດຄິວ ເມື່ອເວລາເຂົາເຈົ້າເຮັດວຽກສຳເລັດແລ້ວ ແລະ ຈະເອົາວຽກນັ້ນມາສົ່ງຢູ່ໜ້າ ໂຕະຂອງຄູ ກໍຕໍ່ເມື່ອຄູ ອ່ານເລກທີຂອງບັດຄິວນັ້ນ. ໃນເວລາທີ່ນັກຮຽນກຳລັງລໍຖ້າທ່ານ, ໃຫ້ເອົາ

ວຽກໃດວຽກໜຶ່ງ ໃຫ້ເຂົາເຈົ້າເຮັດ, ເອົາວຽກຂຽນສັ້ນໆໃຫ້ເຂົາເຈົ້າເຮັດ, ອາດຈະເຮັດ ສຳລັບໃຫ້ຄະແນນເພີ່ມເຕີມ.

ພ້ອມກັນນັ້ນທ່ານຍັງອາດຂໍໃຫ້ນັກຮຽນທີ່ຮຽນຂັ້ນສູງກວ່າຊ່ວຍທ່ານ ເພື່ອກວດໃຫ້ຄະແນນວຽກທີ່ມອບໝາຍໃຫ້ຫຼືນັກຮຽນຂອງທ່ານອາດແລກປ່ຽນວຽກກັນ ແລະ ເຂົາເຈົ້າສາມາດໃຫ້ຄະແນນວຽກຂອງກັນ ແລະ ກັນ. ເຖິງຢ່າງໃດກໍດີ ທ່ານມີຄວາມຈຳເປັນຕ້ອງຕິດຕາມກຳກັບການໃຫ້ຄະແນນຂອງນັກຮຽນ. ແຕ່ມັນກໍເປັນກິດຈະກຳທີ່ມ່ວນຊື່ນຫຼາຍຂຶ້ນ ທີ່ເຫັນວ່ານັກຮຽນວັດຜົນແຕ່ລະຄົນແນວໃດ. ທ່ານສາມາດໄດ້ຮັບຄວາມເຫັນຢ້ອນກັບ ກ່ຽວກັບ ສິ່ງທີ່ນັກຮຽນເຂົ້າໃຈ ແລະ ສິ່ງທີ່ເຂົາເຈົ້າບໍ່ເຂົ້າໃຈ.

ຖ້າຫາກວ່າ ວຽກບ້ານເປັນພາກສ່ວນທີ່ສຳຄັນຂອງບົດຮຽນທີ່ສອນໃນຫ້ອງຂອງທ່ານ ແລະ ທ່ານ ບໍ່ໃຫ້ຜູ້ໃດຊ່ວຍກວດໃຫ້ຄະແນນວຽກບ້ານຂອງນັກຮຽນ, ໃຫ້ທ່ານກວດໃຫ້ຄະແນນ ຕົວຢ່າງ ຂອງວຽກບ້ານທີ່ມອບໝາຍໃຫ້ເພື່ອເປັນການປະຢັດເວລາ. ສຳລັບວຽກທີ່ທ່ານບໍ່ໃຫ້ຄະແນນ, ກໍ ໃຫ້ແຈກຢາຍ ເຈ້ຍຄຳຕອບ ເພື່ອນັກຮຽນສາມາດວັດຜົນການເຮັດວຽກບ້ານຂອງເຂົາເຈົ້າເອງ ຫຼື ເອົາເວລານອກໂມງ ສິດສອນໃນຫ້ອງເພື່ອອ່ານຄຳຕອບຂອງວຽກບ້ານໃຫ້ທັງໝົດຫ້ອງ.

ໃຫ້ຕໍ່ສູ້ກັບພາລະແບກຫາບຂອງການກວດໃຫ້ຄະແນນການສອບເສັງຫຼາຍອັນ, ໃຫ້ເອົານັກຮຽນ ເຂົ້າມາຮ່ວມນຳ. ໃນເວລາໃດກໍຕາມທີ່ເປັນໄປໄດ້, ໃຫ້ທ່ານເຮັດການສອບເສັງທີ່ສັ້ນ, ບໍ່ເຮັດການສອບ ເສັງຈົນໃຊ້ເວລາໝົດຊົ່ວໂມງສອນ. ນັກຮຽນຂອງທ່ານສາມາດຊ່ວຍເຫຼືອທ່ານ ໃນຂະບວນການກວດ ໃຫ້ຄະແນນ. ສຳລັບຄຳຖາມແບບປາລະໄນ ທີ່ຖາມຢູ່ໃນບົດສອບເສັງ, ມີ ຄູສອນຈຳນວນໜຶ່ງກະກຽມເຈ້ຍຄຳຕອບໄວ້ລ່ວງໜ້າ, ເມື່ອເວລານັກຮຽນທຸກຄົນ ສຳເລັດການ ສອບເສັງແລ້ວ, ເຂົາເຈົ້າແລກປ່ຽນເຈ້ຍສອບເສັງຂອງເຂົາເຈົ້າ ແລະ ນຳໃຊ້ເຈ້ຍຄຳຕອບນັ້ນ ເພື່ອໃຫ້ຄະແນນເຈ້ຍສອບເສັງຂອງຄູ່ຂອງຕົນ. ແລ້ວຄູສອນກໍເກັບເອົາເຈ້ຍສອບເສັງເຫລົ່ານັ້ນ ມາກວດເບິ່ງການໃຫ້ຄະແນນ ແລະ ກວດໃຫ້ ຄະແນນພາກສ່ວນຄຳຖາມແບບອັດຕະໄນທີ່ມີຢູ່ ໃນຂໍ້ສອບເສັງນັ້ນ. ມີວິທີອື່ນອີກທີ່ຈະກວດຂໍ້ສອບແນວນີ້ ຄື ແທນທີ່ຈະນຳໃຊ້ເຈ້ຍຄຳຕອບຄູສາ ມາດອ່ານຄຳຕອບແບບປາລະໄນທີ່ຖືກຕ້ອງດ້ວຍສຽງດັງໆ ແລະ ນັກຮຽນສາມາດໃຫ້ຄະແນນແກ່ ຂໍ້ສອບເສັງຂອງກັນ ແລະ ກັນ. ການນຳໃຊ້ວິທີການນີ້ ຫຼື ຍຸດທະສາດທີ່ຄ້າຍຄືກັນນີ້, ນັກຮຽນບໍ່ ຈຳເປັນຈະຕ້ອງລໍຖ້າຫຼາຍມື້ ຫຼື ເປັນອາທິດ ເພື່ອຢາກຮູ້ຈັກວ່າ ເຂົາເຈົ້າໄດ້ເຮັດອັນໃດ ແລະ ມີອັນ ໃດແດ່ ທີ່ຈະຕ້ອງໄດ້ເຮັດການປັບປຸງ.

ການສ່ອງແສງກ່ຽວກັບການສິດສອນຂອງທ່ານ. ການປັບປຸງການຮຽນຂອງນັກຮຽນຢູ່ໃນ ຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ແມ່ນເປັນສິ່ງທ້າທາຍ ທີ່ເຮັດໃຫ້ພວກເຮົາບໍ່ໃຫ້ມີ ການພັດທະ ນາທາງດ້ານວິຊາຊີບຄູ ຂັດຂວາງການປັບປຸງສິ່ງທີ່ເຮົາສອນ ແລະ ເຮົາຈະສິດສອນແນວໃດ. ພ້ອມກັນນັ້ນມັນຍັງມີຄວາມສ່ຽງທີ່ພວກເຮົາຈະມີຄວາມເບື່ອໜ່າຍ ແລະ ນັກຮຽນຂອງພວກເຮົາ ກໍຈະບໍ່ໄດ້ຮຽນຢ່າງ ເຕັມເມັດເຕັມໜ່ວຍ.

ຄຳຖາມ

1. ການປະເມີນຜົນແມ່ນຫຍັງ?
2. ຜົນໄດ້ຮັບຂອງການຮຽນຮູ້ມີຄີແນວໃດ?
3. ການປະເມີນຜົນຕົວຈິງໃຊ້ວິທີ ແລະ ເທັກນິກແນວໃດແດ່?
4. ເປັນຈຶ່ງມີການສ່ອງແສງຄືນ ແລະ ການປະເມີນຜົນ?
5. ການປະເມີນທັກສະ ແລະ ທັດສະນະຄະຕິພວກເຮົາປະເມີນແນວໃດ?
6. ຂໍ້ຜິດພາດຂອງການປະເມີນຜົນມີຄີແນວໃດ?
7. ການປະເມີນຜົນການຮຽນການສອນ ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫລາຍ ຄູຄວນມີວິທີແນວໃດແດ່?

ຄູ່ມືເຫຼັ້ມທີ 3

ການສົ່ງເສີມສຸຂະພາບທີ່ເປັນການຮຽນຮ່ວມ ແລະເປັນເພື່ອນມິດໃນການຮຽນຮູ້



ກະຊວງສຶກສາທິການ
ສູນການສຶກສາຮຽນຮ່ວມ
ສະໜັບສະໜູນໂດຍ ອົງການອຸຍແນດສະໂກ
ນະຄອນຫຼວງວຽງຈັນ, ສປປ ລາວ
2011

ຄຳນຳ

ຊຸດຄູ່ມືແນະນຳການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດຕໍ່ການຮຽນຮູ້ ໄດ້ສ້າງຂຶ້ນໂດຍ ອົງການອຸຍແນສໂກປະຈຳພາກພື້ນອາຊີ-ປາຊີຟິກ ພ້ອມທັງພິມແຈກຢາຍຢ່າງກ້ວາງຂວາງ ໃນທົ່ວພາກພື້ນ. ຄູ່ມືດັ່ງກ່າວມີທັງໝົດ 4 ເຫຼັ້ມຄື: ຄູ່ມືແນະນຳການສ້າງສະພາບແວດລ້ອມ, ຄູ່ມືແນະນຳການຈັດການສອນຫ້ອງຮຽນຮ່ວມ, ຄູ່ມືແນະນຳການສົ່ງເສີມສຸຂະພາບ, ຄູ່ມືແນະນຳການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ ໃນຫ້ອງຮຽນຮ່ວມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ສຳລັບຄູ່ມືແນະນຳເຫຼັ້ມນີ້ເປັນຄູ່ມືແນະນຳເຫຼັ້ມທີ 3: ເນື້ອໃນເວົ້າເຖິງການສົ່ງເສີມສຸຂະພາບທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຈຸດປະສົງຫຼັກຂອງຄູ່ມືແນະນຳເຫຼັ້ມນີ້ ແມ່ນ ເພື່ອການຂັນຂະຫຍາຍນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ, ແນວຄວາມຄິດໃນການສ້າງສະພາບແວດລ້ອມໂຮງຮຽນທີ່ສະອາດ, ການປະເມີນ ແລະ ຕິດຕາມດ້ານສຸຂະພາບຂອງເດັກໃນໂຮງຮຽນ ແລະ ກຳນົດແນວທາງ ເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ. ສະນັ້ນ, ເພື່ອເສີມສ້າງຄວາມສາມາດໃຫ້ແກ່ຜູ້ຊົມໃຊ້ ກ່ຽວກັບການສອນ ທັກສະພື້ນຖານດ້ານສຸຂະສຶກສາໃນໂຮງຮຽນ, ວິທີການສ້າງສະພາບແວດລ້ອມ, ການຈັດການສອນຫ້ອງຮຽນຮ່ວມ, ການສົ່ງເສີມສຸຂະພາບ ແລະ ການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນທີ່ເປັນການຮຽນຮ່ວມ ແລະ ເປັນມິດໃນການຮຽນຮູ້ຕາມຫຼັກວິຊາການ ເພື່ອສ້າງໂຮງຮຽນ ແລະ ຫ້ອງຮຽນໃຫ້ກາຍເປັນການສຶກສາຮຽນຮ່ວມ ແລະ ເປັນມິດຫຼາຍຂຶ້ນ, ຊຶ່ງເປັນປະໂຫຍດສູງສຳລັບຜູ້ສ້າງນະໂຍບາຍ, ຜູ້ຈັດຕັ້ງປະຕິບັດ ແລະ ຊຸມຊົນ.

ເພື່ອສຳເລັດເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫະສະວັດ ເພື່ອການພັດທະນາໃນປີ 2015. ອົງການອຸຍແນສໂກໄດ້ແນະນຳໃຫ້ແຕ່ລະປະເທດສະມາຊິກດຳເນີນການແປເປັນພາສາຂອງຕົນເອງ ແລະ ດັດປັບໃຫ້ແທດເໝາະກັບສະພາບຕົວຈິງ ຂອງແຕ່ລະປະເທດ. ສຳລັບ ສປປ ລາວ, ອະດີດກົມສາມັນສຶກສາໄດ້ຮັບການສະໜັບສະໜູນ ໃນການແປຈາກສະບັບຕົ້ນທີ່ເປັນພາສາອັງກິດມາເປັນສະບັບພາສາລາວ. ຈາກນັ້ນ, ໃນປີ 2010 ໂດຍການສືບຕໍ່ສະໜັບສະໜູນຈາກອົງການ UNESCO, ສູນການສຶກສາຮຽນ ຮ່ວມໄດ້ຮ່ວມກັບກົມສ້າງຄູ, ກົມປະຖົມ ແລະ ອະນຸບານ ແລະ ສະຖາບັນສ້າງຄູ 8 ແຫ່ງ ຈັດກອງປະຊຸມວິຊາ ການຮຽບຮຽງ, ປັບປຸງ ແລະ ຮິບໂຮມອີກຄັ້ງໜຶ່ງ. ການປັບປຸງ ແລະ ຮິບໂຮມຄັ້ງນີ້ບໍ່ໄດ້ປ່ຽນແປງເນື້ອໃນແຕ່ປະການໃດ ພຽງແຕ່ນຳໃຊ້ຄຳສັບ ແລະ ສຳນວນເປັນ ພາສາລາວ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ຕົວຢ່າງຈຳນວນໜຶ່ງຖືກຄັດອອກ ເພື່ອໃຫ້ມີລັກສະນະກະທັດລັດແກ່ຜູ້ຊົມໃຊ້.

ສູນການສຶກສາຮຽນຮ່ວມສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງທີມງານວິຊາການຈາກກະຊວງ ສຶກສາທິການ ແລະ ສະຖາບັນສ້າງຄູທັງ 8 ແຫ່ງ ທີ່ໄດ້ໃຫ້ການຮ່ວມມື ໃນການຮຽບຮຽງຄູ່ມື ດັ່ງກ່າວ. ພິເສດຂໍຂອບໃຈມາຍັງ ອົງການອຸຍແນສໂກ ທີ່ໃຫ້ການສະໜັບສະໜູນດ້ານງົບປະມານ ນັບທັງການຮຽບຮຽງ ແລະ ຄ່າພິມແຈກຢາຍອີກດ້ວຍ. ເປັນທີ່ແນ່ນອນວ່າການປັບປຸງ,

ຮົບໂຮມຄັ້ງນີ້ຈະບໍ່ປາ ສະຈາກໄດ້ຂໍ້ຂາດຕົກບົກຜ່ອງ. ສູນການສຶກສາຮຽນຮ່ວມມີ ຄວາມຍິນດີຮັບ
ເອົາຄຳຕຳນິຕິຊົມທຸກປະການຈາກຜູ້ອ່ານ ແລະ ຜູ້ຊົມໃຊ້ ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນໃນອະນາຄົດ.

ຜູ້ອຳນວຍການສູນການສຶກສາຮຽນຮ່ວມ

ສາລະບານ

ໜ້າ

ພາກສະເໜີ.....02
ບົດທີ 1. ນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ ……..……...04
1. ການຜັນຂະຫຍາຍນະໂຍບາຍສົ່ງເສີມສຸຂະພາບ.....……04
2. ການໂຄສະນາເຜີຍແຜ່ນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ……..06
3. ການສ້າງຂໍ້ຕົກລົງຮ່ວມກັນ……..……..07
4. ການສ້າງຂໍ້ຕົກລົງຮ່ວມກັນໂດຍຜ່ານການແລກປ່ຽນ.....07
5. ການປະເມີນຜົນ ແລະ ການຕິດຕາມສະຖານະພາບດ້ານນະໂຍບາຍສຸຂະພາບ
ໃນໂຮງຮຽນ……..……...09
5.1 . ການປະເມີນຜົນ ແລະການຕິດຕາມນະໂຍບາຍຂອງໂຮງຮຽນ...……..09
6. ການແກ້ໄຂບັນຫາຄວາມຮຸນແຮງແລະ ການຫັນນະໂຍບາຍສູ່ພາກປະຕິບັດ.....11
6.1 . ຮູບແບບຂອງຄວາມຮຸນແຮງທີ່ເປັນພື້ນຖານ……...11
ກ. ຮູບແບບຄວາມຮຸນແຮງ……11
ຂ. ສາເຫດຂອງຄວາມຮຸນແຮງ……..……..12
ຄ. ການສ້າງແຜນທີ່ຂອງຄວາມຮຸນແຮງ……..……..13
6.2 .ສັນຍານເຕືອນສຳລັບເດັກທີ່ຖືກທາລຸນ……14
6.3 . ສັນຍານເຕືອນສຳລັບເດັກທີ່ມີຄວາມສ່ຽງ……...15
7. ແນວທາງເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ……..17
ບົດທີ 2. ການສອນທັກສະແກ່ເດັກເພື່ອການດຳລົງຊີວິດ……19
1. ການສອນທັກສະພື້ນຖານດ້ານສຸຂະສຶກສາ ……..……...19
2. ທັກສະທີ່ຈຳເປັນໃນການຮຽນຮູ້. ……..……...21
3. ການນຳໃຊ້ທັກສະໃນການຮຽນຮູ້. ……..……...23
4. ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານເພື່ອປ້ອງກັນ ເອັດໄອວີ/ເອດສ์……26
ບົດທີ 3. ແນວຄວາມຄິດກ່ຽວກັບການສ້າງສະພາບແວດລ້ອມໂຮງຮຽນທີ່ສະອາດ ແລະ
ສົ່ງອຳນວຍຄວາມສະດວກຕ່າງໆ……...32
1. ແນວທາງເພື່ອຈັດຕັ້ງປະຕິບັດນະໂຍບາຍ……..……32
2. ກິດຈະກຳເພື່ອປະຕິບັດ:ການນຳເອົາເດັກເຂົ້າມີສ່ວນຮ່ວມໃນວຽກສຸຂະອະນາໄມ
ສຶກສາ.....34
3. ການນຳເອົາເດັກເຂົ້າມີສ່ວນຮ່ວມໃນການສະໜອງນ้ຳທີ່ປອດໄພ……..37
4. ເດັກສາມາດຊ່ອຍເຫຼືອໄດ້ ……38
5. ການຕິດຕາມ……...39

ພາກສະເໜີ

ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມສຸຂະພາບໃນໂຮງຮຽນ ໄດ້ເຊັນຮັບຮອງຮ່ວມກັນ ລະຫ່ວາງ ກະຊວງສຶກສາທິການແລະ ກະຊວງສາທາລະນະສຸກໃນຄັ້ງ ວັນທີ 21/5/2010. ນະໂຍບາຍນີ້ໄດ້ຖືກພັດທະນາຂຶ້ນ ເພື່ອແນໃສ່ເປັນບ່ອນອີງ ໃນການຈັດຕັ້ງປະຕິບັດຍຸດທະສາດ ການສົ່ງເສີມສຸຂະພາບໃນໂຮງຮຽນ ໃຫ້ເປັນເອກະພາບ ສຳລັບຄະນະກຳມະການສົ່ງເສີມສຸຂະພາບໃນໂຮງຮຽນແຕ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ, ຜູ້ບໍລິຫານໂຮງຮຽນ ນັບແຕ່ຊັ້ນອະນຸບານ ສຶກສາຈົນເຖິງຊັ້ນມັດທະຍົມສຶກສາ ທັງເປັນບ່ອນອີງ ໃຫ້ແກ່ບັນດາກະຊວງ, ບັນດາອົງການຈັດຕັ້ງສາກົນທີ່ມີຈຸດປະສົງສະໜັບສະໜູນ ວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ. ສຳລັບກຸ່ມເປົ້າໝາຍ ແມ່ນເດັກນັກຮຽນອະນຸບານ, ຫ້ອງ ກຽມປະຖົມ ແລະ ມັດທະຍົມສຶກສາ.

ນະໂຍບາຍສະບັບນີ້ມີ 7 ອົງປະກອບ ຄື: ການຮັກສາສຸຂະພາບສ່ວນບຸກຄົນ ແລະ ທັກສະຊີວິດ, ສະພາບແວດລ້ອມດ້ານກາຍະພາບ, ສະພາບແວດລ້ອມດ້ານຈິດຕະ-ສັງຄົມ, ການກັນ ແລະ ຄວບຄຸມພະຍາດ, ການດູແລ ແລະ ການບໍລິການສຸຂະພາບ, ໂພຊະນາການ ແລະ ການຮ່ວມງານລະ ຫ່ວາງໂຮງຮຽນ ແລະ ຊຸມຊົນ

<u>ໂຮງຮຽນສົ່ງເສີມສຸຂະພາບ/ການສົ່ງເສີມສຸຂະພາບໃນໂຮງຮຽນ</u>

ໝາຍເຖິງໂຮງຮຽນທີ່ມີຂະບວນການເກື້ອໜູນ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດວຽກງານທີ່ ພົວພັນ ເຖິງສຸຂະພາບເຊັ່ນ: ສະພາບແວດລ້ອມທີ່ດີ, ມີການກັນ ແລະ ດູແລສຸຂະພາບ, ອາຫານ, ໂພຊະນາການ ທີ່ຖືກຕ້ອງໂດຍມີການຮ່ວມມື, ການປະສານງານກັບໜ່ວຍພາກສ່ວນ.

<u>ການສົ່ງເສີມສຸຂະພາບ</u>

ໝາຍເຖິງຂະບວນການເກື້ອໜູນ ແລະ ສະໜັບສະໜູນໃຫ້ບຸກຄົນ ແລະ ກຸ່ມຄົນມີຄວາມສາມາດ ໃນ ການຄວບຄຸມ ດູແລສຸຂະພາບ ແລະ ປັບປຸງສຸຂະພາບຂອງເຂົາເຈົ້າເອງ.

<u>ການມີສຸຂະພາບດີ</u>

ໝາຍເຖິງຄົນທີ່ມີສະພາບທີ່ສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ ໜ່ງແຕ່ສະພາບ ບໍ່ເປັນພະຍາດຫຼື ພິການເທົ່ານັ້ນ.

<u>ສຸຂະພາບເດັກໃນປະຈຸບັນ</u>

ບັນດາພະຍາດທີ່ເກີດຂຶ້ກັບເດັກ ສ່ວນໜ່ງແມ່ນໄຂ້ຍຸງ ອັກເສບລະບົບຫາຍໃຈຮຸນແຮງ ຖອກທ້ອງອັກເສບປາກ ແລະ ແຂ້ວ ແມ່ກາຝາກໃນລຳໄສ້ (ແມ່ທ້ອງ) ເລືອດຈາງ, ໄຂ້ຫັວດ ແລະ ພະຍາດອື່ນໆ ລວມທັ້ງ ການບໍລິໂພກອາຫານທີ່ບໍ່ເປັນປະໂຫ່ງດ.

ການປ້ອງກັນບັນດາພະຍາດຕິດແປດ

ການໃຫ້ຄວາມຮູ້ກ່ຽວກັບການກັນ ແລະ ຄວບຄຸມພະຍາດຍັງບໍ່ທັນທົ່ວເຖິງ ຈຶ່ງພາໃຫ້ເດັກຕິດເຊື້ອພະຍາດຕ່າງໆ ເຊັ່ນ: ພະຍາດຖອກທ້ອງ, ໄຂ້ຍຸງ, ອັກເສບປອດ, ວັນນະໂຣກ, ໄຂ້ເລືອດອອກ, ແມ່ກາຝາກ, ຕາແດງ, ໄຂ້ຫວັດ (ສັດປີກ, ສາຍພັນໃໝ່, ພະຍາດຕາມລະດູການ...). ນອກຈາກນັ້ນ ຍັງມີພະຍາດ ທີ່ເກີດຂຶ້ນຍ້ອນຂາດການອະນາໄມ ເຊັ່ນ: ເຫົາ, ເມັນ, ພະຍາດຜິວໜັງ (ຂີ້ຫິດ, ຂີ້ເຮື້ອນ, ຂີ້ກາກ), ພະຍາດຕິດຕໍ່ ທາງເພດສຳພັນ(ເອດສ໌, ອັກເສບຕັບບີ), ພະຍາດທີ່ເກີດຈາກການສູບຢາ (ມະເຮັງປອດ..), ການບໍລິໂພກ ອາຫານ ທີ່ສ່ຽງຕໍ່ການເປັນພະຍາດແຂ້ວແມງ, ພະຍາດອ້ວນ ແລະ ບັນຫາໂພຊະນາການອື່ນໆ. ດັ່ງນັ້ນ, ໂຮງຮຽນເປັນຈຸດລິເລີ່ມທີ່ດີທີ່ສຸດ ໃນການສ້າງມາດຕະການການກັນ ແລະ ຄວບຄຸມພະຍາດລະບາດ ໂດຍສົ່ງເສີມພຶດຕິກຳການຮັກສາສຸຂະພາບທີ່ຖືກຕ້ອງຢ່າງຈິງຈັງ.

ໃນຊ່ວງຫຼາຍປີທີ່ຜ່ານມາ, ກະຊວງສຶກສາທິການ ແລະ ກະຊວງສາທາລະນະສຸກໄດ້ຮ່ວມກັນສ້າງກ່ອງສີຟ້າ ເພື່ອນຳໃຊ້ໃນການສິດສອນ ແລະ ພວມມີການຂະຫຍາຍການນຳໃຊ້ຢ່າງກວ້າງຂວາງ. ນອກຈາກນີ້ ຍັງມີການໃຫ້ການບໍລິການທາງດ້ານການແພດ ໂດຍສະເພາະ ການກິນຢາຂ້າແມ່ທ້ອງ. ດ້ານວຽກງານໂພຊະນາການກໍມີການໃຫ້ອາຫານເສີມ ເຊິ່ງພວມປະຕິບັດໃນບາງແຂວງກໍເປັນສ່ວນໜຶ່ງ ຂອງນະໂຍບາຍ ເຊິ່ງແນໃສ່ການສົ່ງເສີມສຸຂະພາບ ແລະ ການສຶກສາເພື່ອທຸກຄົນ.

ປຶ້ມຄູ່ມືເຫລັ້ມນີ້ຈະຊ່ວຍເຫຼືອທ່ານ ແລະ ເພື່ອນຮ່ວມງານ ເພື່ອເລີ້ມຕົ້ນພັດທະນາອົງປະກອບ ກ່ຽວກັບວຽກງານສຸຂະພາບ ແລະ ການປົກປ້ອງໃນໂຮງຮຽນທີ່ມີປະສິດທິຜົນ. ຢູ່ໃນຄູ່ມືເຫຼັ້ມ 2, ພວກເຮົາໄດ້ເຮັດວຽກ ເພື່ອນຳເອົາເດັກທຸກຄົນມາເຂົ້າໂຮງຮຽນ. ຖ້າຄວາມພະຍາຍາມຂອງພວກເຮົາບັນລຸໄດ້ຜົນສຳເລັດ, ຈະມີເດັກທີ່ມີພື້ນຖານຄວາມສາມາດແຕກຕ່າງຫຼາກຫຼາຍ ມີຈຳນວນຫຼາຍຂຶ້ນມາເຂົ້າໂຮງຮຽນທີ່ມີການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ເດັກເຫຼົ່ານີ້ຈະເປັນຜູ້ໄດ້ຮັບຜົນປະໂຫຍດສູງສຸດ ເມື່ອໄດ້ຮ່ຳຮຽນໃນສະພາບແວດລ້ອມທີ່ສົ່ງເສີມສຸຂະພາບ ແລະ ໄດ້ຮັບການ ປົກປ້ອງເປັນຢ່າງດີ.

ບົດທີ 1
ນະໂຍບາຍສົ່ງເສີມສຸຂະພາບ

1. ນະໂຍບາຍສົ່ງເສີມສຸຂະພາບ ແລະ ການປົກປ້ອງເດັກທຸກຄົນ.

ການຮັບປະກັນໃຫ້ເດັກທຸກຄົນມີສຸຂະພາບດີ, ໄດ້ຮັບການປົກປ້ອງ ແລະ ສາມາດທີ່ຈະຮຽນຮູ້ເປັນພາກສ່ວນທີ່ສຳຄັນຂອງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ການປັບປຸງສຸຂະພາບ ແລະ ການຮຽນຮູ້ຂອງເດັກໂດຍຜ່ານໂຄງການສົ່ງເສີມສຸຂະພາບ ແລະ ການປົກປ້ອງໃນ ໂຮງຮຽນນັ້ນບໍ່ແມ່ນສິ່ງໃໝ່, ຍ້ອນວ່າພວກເຂົາຮູ້ດີວ່າຄວາມສາມາດຂອງເດັກ ທີ່ຈະໄດ້ຮັບການພັດທະນາຢ່າງເຕັມທີ່ນັ້ນ ຂຶ້ນກັບການມີສຸຂະພາບທີ່ດີ, ມີໂພຊະນາການດີ ແລະ ມີສະພາບ ແວດລ້ອມຂອງການຮຽນຮູ້ທີ່ປອດໄພ, ເມື່ອໃດເດັກຫາກມີຄວາມຮູ້ສຶກປອດໄພທີ່ສຸດເທົ່ານັ້ນ ເດັກຈຶ່ງ ຈະສາມາດຮຽນຮູ້ໄດ້ຢ່າງເຕັມທີ່.

ນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນໝາຍເຖິງການປະຕິບັດກິດຈະກຳຕ່າງໆທີ່ພວກເຮົາຄວນຈະເຮັດເພື່ອປັບປຸງສຸຂະພາບ, ສຸຂະອະນາໄມ, ໂພຊະນາການ ແລະຄວາມປອດໄພຂອງເດັກ, ໂດຍສະເພາະເດັກ ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ. ນະໂຍບາຍດັ່ງກ່າວ ຈະຮັບປະກັນໃຫ້ໂຮງຮຽນມີຄວາມປອດໄພ ແລະ ປົກປ້ອງສົ່ງເສີມໃຫ້ມີສະພາບແວດລ້ອມທາງບວກດ້ານອາລົມຈິດ ສຳລັບເດັກ.

ການນຳເອົາໜ້າຍພາກສ່ວນເຂົ້າມີສ່ວນຮ່ວມ ເຊິ່ງປະກອບມີ: ຄູ, ພໍ່ແມ່, ຜູ້ປົກຄອງເດັກ, ເດັກ, ຜູ້ນຳຊຸມຊົນ ແລະ ຜູ້ໃຫ້ບໍລິການຕ່າງໆທາງສັງຄົມເປັນແນວທາງທີ່ດີທີ່ສຸດ ເພື່ອຜັນຂະຫຍາຍການປະຕິບັດນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ. ຫົວໃຈສຳຄັນກໍຄືນຳເອົາຄົນເຫຼົ່ານີ້ ມາເລີ້ມກັນຄົ້ນຄິດ, ສົນທະນາ ແລະ ຕົກລົງດຳເນີນການປະຕິບັດ.

ຕົວຢ່າງ ຂອງການຜັນຂະຫຍາຍນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ
(ອີງໃສ່ນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມສຸຂະພາບໃນໂຮງຮຽນ ສະບັບປີ 2010)

ປະເດັນບັນຫາຕ່າງໆຂອງນະໂຍບາຍ	ຕົວຢ່າງຂອງການຜັນຂະຫຍາຍນະໂຍບາຍໃນໂຮງ ຮຽນ
- ຢາສູບ ແລະ ໂຮງຮຽນທີ່ປອດຢາສູບ -ລົບນະລົງຕ້ານໄພຢາເສບຕິດທຸກປະເພດຢູ່ໃນໂຮງຮຽນ	♦ ຫ້າມຄູ ແລະ ນັກຮຽນສູບຢາໃນໂຮງຮຽນ ♦ ຫ້າມຂາຍຢາສູບໃຫ້ເດັກ ♦ ຫ້າມໂຄສະນາ ແລະ ສົ່ງເສີມຢາສູບ ♦ ຫ້າມບໍ່ໃຫ້ເດັກພົວພັນຢາເສບຕິດ ທຸກປະເພດ. ♦ ໃຫ້ຄວາມຮູ້ກ່ຽວກັບສານເສບຕິດ ແລະ ຄວາມອັນຕະລາຍຂອງມັນ, ໂດຍໃຊ້ຮູບພາບເປັນເຄື່ອງມື ຫຼື ນຳໃຊ້ສື່ຕ່າງໆ. ♦ ຈັດວັນຕ້ານຢາເສບຕິດໃນໂຮງຮຽນ
ສຸຂະອະນາໄມ	- ໃຫ້ສຸຂະສຶກສາເດັກ ຮູ້ປະຕິບັດຫຼັກການອະນາໄມ 3

ປະເດັນບັນຫາຕ່າງໆຂອງນະໂຍບາຍ	ຕົວຢ່າງຂອງການຜັນຂະຫຍາຍນະໂຍບາຍໃນໂຮງ ຮຽນ
	ສະອາດ ແລະ ໃຫ້ກາຍເປັນຄວາມຊິນເຄີຍ ເຊັ່ນ: ກິນສະອາດ, ດື່ມສະອາດ ແລະ ນຸ່ງຫົ່ມສະອາດ ເປັນ ປົກກະຕິ ♦ ໃຫ້ສຸຂະສຶກສາ ຕາມນະໂຍບາຍຂອງໂຮງຮຽນ ♦ ມີນ້ຳດື່ມ ແລະ ນ້ຳໃຊ້ທີ່ປອດໄພ ♦ ແຍກຫ້ອງນ້ຳຍິງ - ຊາຍ ♦ ມີອ່າງເກັບນ້ຳ ແລະ ນ້ຳສະອາດສຳລັບຫ້ອງນ້ຳ ♦ ແນະນຳ ໃຫ້ເດັກຮູ້ຈັກວິທີລ້າງມືໃຫ້ຖືກຕ້ອງ ກ່ອນກິນອາຫານ ແລະ ລ້າງມືພາຍຫຼັງໃຊ້ວິດຖ່າຍ ♦ ໃຫ້ເດັກຮູ້ແຍກນ້ຳດື່ມ ແລະນ້ຳໃຊ້ ♦ ປູກຈິດສຳນຶກໃຫ້ເດັກຮູ້ບ່ອນຖິ້ມຂີ້ເຫຍື້ອ ແລະ ຖິ້ມ ໃຫ້ຖືກຖັງ ♦ ມີຖັງເກັບຂີ້ເຫຍື້ອຢູ່ໜ້າຫ້ອງທຸກໆຫ້ອງ ♦ ມີທະນາຄານຂີ້ເຫຍື້ອ ແລະບ່ອນກຳຈັດສິ່ງເສດ ເຫຼືອຢູ່ໃນໂຮງຮຽນ ແລະ ການນຳມາຜະລິດຄືນ ໃໝ່ ♦ ສະມາຄົມພໍ່ແມ່ນັກຮຽນ, ຜູ້ບໍລິຫານໂຮງຮຽນ ຕ້ອງມີພັນທະຢ່າງຕັ້ງໜ້າໃນການປົກປັກຮັກສາ ສິ່ງແວດລ້ອມ
- ການໃຫ້ທັກສະຄວາມຮູ້ພື້ນຖານກ່ຽວ ກັບການປ້ອງກັນເອັດໄອວີ/ເອດສ໌ ເອັດໄອວີ/ເອດສ໌ ແລະ ການບໍ່ໄດ້ເຂົ້າ ໂຮງຮຽນ	♦ ໃຫ້ສຸຂະສຶກສາ ແລະ ເຜີຍແຜ່ລົມນະລົງຢ່າງ ເນື່ອງນິດລຽນຕິດດ້ານທັກສະພື້ນຖານທີ່ແນ ໃສ່ການປ້ອງກັນໂລກ ເອັດໄອວີ/ເອດສ໌ ♦ ກະຕຸ້ນການຊ່ວຍເຫຼືອແບບເພື່ອນສອນເພື່ອນ ແລະ ການແນະແນວ ກ່ຽວກັບການປ້ອງກັນເອັດໄອວີ/ ເອດສ໌ ແລະ ຜົນຮ້າຍຂອງໂລກເອດສ໌, ສາເຫດຂອງ ການຕິດເຊື້ອ ແລະ ເຜີຍແຜ່ທາງສື່ຕ່າງໆໃນໂຮງຮຽນ. ♦ ບໍ່ຈຳແນກຄູ ແລະ ນັກຮຽນທີ່ຕິດເຊື້ອເອັດໄອວີ ♦ ຮັບປະກັນການເຂົ້າເຖິງພາຫະນະປ້ອງກັນ
ການລວນລາມທາງເພດແລະການທຳ ຮ້າຍຂົ່ມຂູ່ຂອງນັກຮຽນ ລວມທັງການ ກະທຳໂດຍຄູ	♦ ໂດຍທາງກົດໝາຍ, ຕ້ອງຮັບປະກັນວ່າການລວນ ລາມ ແລະ ການໃຊ້ຄວາມຮຸນແຮງທາງເພດຖືກເກືອດ ຫ້າມໃນໂຮງຮຽນໂດຍຄູ ແລະ ນັກຮຽນ

ປະເດັນບັນຫາຕ່າງໆຂອງນະໂຍບາຍ	ຕົວຢ່າງຂອງການຜັນຂະຫຍາຍນະໂຍບາຍໃນໂຮງ ຮຽນ
	♦ ເຮັດໃຫ້ທຸກຄົນຮູ້ ແລະຍອມຮັບກົດໝາຍ, ໃຫ້ອຳນາດ ແກ່ເຍົາວະຊົນເພື່ອລາຍງານກໍລະນີທີ່ເກີດຂຶ້ນ ແລະໃຊ້ ມາດຕະການທາງວິໄນທີ່ມີປະສິດທິຜົນສຳລັບຜູ້ຝ່າຝືນ ♦ ໃຫ້ຄວາມຮ່ວມມື ໃນການດຳເນີນຄະດີອາຍາຕໍ່ຜູ້ ໃຫ່ຍທີ່ລວນລາມທາງເພດຕໍ່ເດັກ ຕະຫຼອດເຖິງ ການ ທຳລາຍຮ່າງກາຍຂອງເດັກ.
ການສົ່ງຊຸດເຄື່ອງມືຂອງການຮຽນຮູ້ແບບ ງ່າຍໆ ກ່ຽວກັບການສົ່ງເສີມສຸຂະພາບ ແລະ ໂພຊະນາການໃນໂຮງຮຽນ (ກ່ອງ ສີຟ້າ ແລະ ເຄື່ອງປະຖົມພະຍາບານ)	♦ ເຝິກອົບຮົມ ແລະ ໃຫ້ຄູເປັນຜູ້ນຳພາເຮັດວຽກງານ ກ່ຽວກັບການສົ່ງເສີມສຸຂະພາບ ແລະ ໂພຊະນາການ ແບບງ່າຍໆ ໂດຍຮ່ວມມືກັບພະນັກງານແພດ ແລະ ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ. ♦ ມີລະບຽບການສຳລັບຜູ້ຂາຍອາຫານ ທີ່ຮັບປະ ກັນຄວາມປອດໄພ ທັ້ງເປັນອາຫານທີ່ມີຄຸນນະພາບ, ຖືກຫຼັກສຸຂະອະນາໄມ ແລະ ມາດຕະຖານ, ອາຫານທີ່ຂາຍຕ້ອງເໝາະກັບໄວຂອງເດັກ

2. ການໂຄສະນາເຜີຍແຜ່ ນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ

ການໂຄສະນາວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ໂດຍການເຜີຍແຜ່ໃຫ້ຄູ, ນັກຮຽນ ແລະ ຊຸມຊົນຮຽນຮູ້ການເຝົ້າລະວັງການເກີດພະຍາດລະບາດເກີດຂຶ້ນໄດ້ທຸກເວລາ ຖ້າບໍ່ມີການ ປ້ອງກັນຈາກ ບັນດາ ພະຍາດຕິດແປດທີ່ອັນຕະລາຍຕໍ່ຕົວເດັກ ເຊັ່ນ:

- ພະຍາດຖອກທ້ອງ
- ທ້ອງບິດ,ອະຫິວາ
- ແມ່ກາພາກລຳໄສ້
- ໄຂ້ຍຸງ, ໄຂ້ເລືອດອອກ
- ໄຂ້ຫວັດ
- ໄຂ້ຫວັດສັດປີກ (H1N5)
- ໄຂ້ຫວັດໃຫຍ່ 2009 (H1N1)
- ເອດສໄອວີ/ເອດສ.

ການຜັນຂະຫຍາຍນະໂຍບາຍ ເພື່ອຮັບປະກັນໃຫ້ເກີດສະພາບແວດລ້ອມທີ່ສົ່ງເສີມສຸຂະ ພາບ, ການປົກປ້ອງ ແລະ ເປັນການຮຽນຮ່ວມມັນຮຽກຮ້ອງຕ້ອງການການສະໜັບສະໜູນ ທີ່ກວ້າງຂວາງ. ເພື່ອຈະໄດ້ການສະໜັບສະໜູນດັ່ງກ່າວ ຕ້ອງເລີ້ມດ້ວຍການໂຄສະນາຊົນຂວາຍ

ນັ້ນກໍໝາຍຄວາມວ່າ ຕ້ອງພັດທະນາຂໍ້ມູນຂ່າວສານທີ່ມີຄວາມໝາຍ ແລະ ມີລັກສະນະຈູງໃຈ ເພື່ອຊ່ວຍຜູ້ທີ່ຈະຕັດສິນໃຈ ໄດ້ເຫັນວ່ານະໂຍບາຍນັ້ນ ມີຄວາມຈຳເປັນທີ່ສຸດ.

ຂໍ້ຄວນເອົາໃຈໃສ່:

- ເພື່ອເຮັດໃຫ້ຊຸມຊົນເຂົ້າໃຈກ່ຽວກັບນະໂຍບາຍໃນການສົ່ງເສີມສຸຂະພາບໃນໂຮງຮຽນ
- ເພື່ອເຮັດໃຫ້ຊຸມຊົນມີສ່ວນຮ່ວມ ໃນການຕອບສະໜອງດ້ານທຶນຮອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ
- ເພື່ອເຮັດໃຫ້ຊຸມຊົນເຊື່ອໝັ້ນໂຮງຮຽນ, ໝັ້ນໃຈໃນການນຳເອົາລູກຫຼານຂອງຕົນມາເຂົ້າໂຮງຮຽນ ແລະ ເຮັດໃຫ້ອັດຕາສະເລ່ຍໃນການເຂົ້າຮຽນຂອງນັກຮຽນເພີ່ມຂຶ້ນ.
- ເພື່ອໃຫ້ເດັກທຸກຄົນມີສຸຂະພາບທີ່ດີແລະສາມາດຮ່ຳຮຽນໃນໂຮງຮຽນໄດ້ກ່ຽວກັບປະເດັນບັນຫາສຸຂະພາບ
- ໃນທ້ອງຖິ່ນແລະໂຮງຮຽນຈະສາມາດຊ່ວຍແກ້ບັນຫາໄດ້ຢ່າງໃດ. ພວກເຮົາສາມາດເລີ້ມດ້ວຍສອງກິດຈະກຳ ຕໍ່ໄປນີ້:

3. **ການສ້າງຂໍ້ຕົກລົງຮ່ວມກັນເພື່ອປະຕິບັດນະໂຍບາຍການສົ່ງເສີມສຸຂະພາບ ແລະ ການປົກປ້ອງເດັກໃຫ້ຈັດປະຊຸມກຸ່ມຄົນ ຜູ້ທີ່ສົນໃຈແລກປ່ຽນໃນວຽກງານສົ່ງເສີມສົ່ງເສີມສຸຂະພາບ ແລະ ການປັບປຸງການຮຽນຮູ້ຂອງເດັກໃຫ້ດີຂຶ້ນ.** ກຸ່ມຄົນເຫຼົ່ານີ້ອາດເປັນທີມປະສານງານຂອງໂຄງການທີ່ໄດ້ຮັບ ການເຝິກອົບຮົມກ່ຽວກັບວຽກງານສຸຂະພາບໃນໂຮງຮຽນ. ການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້ ໂດຍໃຫ້ປະກອບຄະນະຮັບຜິດຊອບ. ດີແທ້ຄວນຄັດເລືອກເອົາສະມາຊິກ ຄະນະພັດທະນາການສຶກສາຂັ້ນບ້ານຈຳນວນໜຶ່ງມາເປັນແກນນຳ ໃນການປະຕິບັດວຽກງານດັ່ງກ່າວ. ນອກນີ້ຍັງຕ້ອງພົວພັນພະນັກງານແພດທ້ອງຖິ່ນ, ອາສາສະໝັກ ຫຼື ຜູ້ອື່ນໆເຊັ່ນ: ຜູ້ໃຫ້ບໍລິການທາງສັງຄົມຜູ້ທີ່ສາມາດ ຊ່ວຍທ່ານ ກຳນົດແລະອະທິບາຍກ່ຽວກັບການສົ່ງເສີມສຸຂະພາບ.
ພະນັກງານສາທາລະນະສຸກທີ່ສາມາດໃຫ້ສຸຂະສຶກສາ ເຜີຍແຜ່ຂໍ້ມູນກ່ຽວກັບບັນຫາສຸຂະພາບຂອງເດັກ ໂດຍເນັ້ນເຖິງການປ້ອງກັນພະຍາດເປັນສຳຄັນ ແລະ ພ້ອມກັນວາງແຜນເພື່ອພັດທະນາຕາໜ່າງຂະຫຍາຍວຽກງານສາທາລະນະສຸກ ໃຫ້ການບໍລິການ ການທົ່ວເຖິງໂຮງຮຽນ ທີ່ຢູ່ເຂດຫ່າງໄກສອກຫລີກ ເພື່ອຮັບປະກັນສຸຂະພາບຂອງເດັກໃຫ້ມີສຸຂະພາບດີ ໄປຄຽງຄູ່ກັບການປັບປຸງ ການຮ່ຳຮຽນຂອງເດັກໃຫ້ດີຂຶ້ນ.

4. **ການສ້າງຂໍ້ຕົກລົງຮ່ວມກັນໂດຍຜ່ານການແລກປ່ຽນເພີ້ມທະວີການສະໜັບສະໜຸນໂດຍການແລກປ່ຽນແນວຄວາມຄິດ ແລະ ຕົວຢ່າງຕ່າງໆ ກ່ຽວກັບກິດຈະກຳສົ່ງເສີມສຸຂະພາບໃນໂຮງຮຽນ.** ສິ່ງສຳຄັນຄືທ່ານຕ້ອງບັນຈຸຄົນເຂົ້າມາໃຫ້ຫຼາກຫຼາຍ ເຊັ່ນ: ຜູ້ນຳແບບເປັນທາງການ ແລະ ບໍ່ເປັນທາງການ, ຜູ້ຍິງ, ຜູ້ຊາຍ, ຊົນເຜົ່າ ແລະ ນັກຮຽນ. ປະຕິບັດ ການບາງຢ່າງທີ່ອາດຈະ ຊ່ວຍທ່ານເຮັດໄດ້ສິ່ງດັ່ງກ່າວນີ້ ປະກອບດ້ວຍ :

- ສົນທະນາໂອ້ລົມກ່ຽວກັບສິ່ງທີ່ເປັນໄພຂົ່ມຂູ່ພື້ນຖານຕໍ່ສຸຂະພາບ ໂດຍລວມທີ່ກະທົບການຮຽນຮູ້ຂອງເດັກ ແລະ ນະໂຍບາຍຂອງໂຮງຮຽນທີ່ຈະໃຫ້ປະໂຫຍດແກ່ນັກຮຽນ, ຄູອາຈານ ແລະ ຊຸມຊົນ ຄືແນວໃດ. ພົບປະກັບຜູ້ນຳຊຸມຊົນ ເພື່ອສົນທະນາອະທິບາຍແນວຄວາມຄິດພື້ນຖານ.
- ໂອ້ລົມກັບພໍ່ແມ່ຜູ້ປົກຄອງ ແລະ ນັກຮຽນເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ເພື່ອໃຫ້ໄດ້ແນວ ຄວາມຄິດຂອງພວກເຂົາ.
- ເຊີນພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກຊຸມຊົນເຂົ້າຮ່ວມປະຊຸມແບບບໍ່ເປັນທາງການ ຫຼື ຈັດການສົນທະນາ
- ແບບບໍເປັນທາງການຫຼັງຈາກທີ່ສິ້ນສຸດພິທີການຈັດງານຕ່າງໆຂອງໂຮງຮຽນ ເພາະວ່າຈະມີຫຼາຍ ຄົນມາໃນຊ່ວງເວລານັ້ນ.
- ສົ່ງເສີມຄວາມຕ້ອງການທີ່ຈຳເປັນ ເພື່ອນະໂຍບາຍ ແລະ ແຜນງານ/ໂຄງການສົ່ງເສີມສຸຂະພາບໃນໂຮງຮຽນ ໂດຍໃຊ້ເຕັກນິກການສຶກສາສາທາລະນະຊົນ ເຊັ່ນ: ໃບປິວ, ແຜ່ນພັບ, ວິທະຍຸ, ການປະຖະກະຖາ ແລະ ໂປສະເຕີ (ສິ່ງເຫຼົ່ານີ້ ແມ່ນແຕ່ນັກຮຽນກໍອາດສາມາດເຮັດໄດ້).
- ຈັດການປະກວດແຂ່ງຂັນບົດຂຽນ ຫຼື ຄຳຂວັນສຳລັບທ້ອງຖິ່ນ.
- ໃຫ້ການອຸປະຖຳການວາງສະແດງຕາມຖະໜົນໃນເຂດທີ່ເປັນຊຸມຊົນໜາແໜ້ນ, ຊຸກຍູ້ເດັກໃຫ້ປະດັບປະດາໂຮງຮຽນ ຫຼື ສູນກາງຊຸມຊົນ ດ້ວຍງານສິນລະປະກຳສົ່ງເສີມສຸຂະພາບ ໃນຊົ່ວໂມງຮຽນສິລະປະກຳ.

ໃນຂະນະທີ່ທ່ານສົ່ງເສີມຄວາມຕ້ອງການທີ່ຈຳເປັນ ເພື່ອນະໂຍບາຍ ແລະ ແຜນງານ/ໂຄງການສົ່ງເສີມສຸຂະພາບໃນໂຮງຮຽນ, ໂດຍສະເພາະ ແມ່ນແນໃສ່ການແກ້ໄຂ ຄວາມຕ້ອງການທີ່ຈຳເປັນຂອງເດັກທີ່ມີພື້ນຖານຊ່ອຍເຫຼືອທ່ານ ແກ້ບັນຫາຄວາມບໍ່ເປັນເອກະພາບ ຫຼື ຄວາມເຂົ້າໃຈຜິດທີ່ອາດເກີດຂຶ້ນກັບປະເດັນສຸຂະພາບທີ່ລະອຽດອ່ອນ ແລະ ພາລະບົດບາດຂອງໂຮງຮຽນໃນການຮັບມືແກ້ບັນຫາ. ການສ້າງຕັ້ງຄະນະກຳມະການ ທີ່ປຶກສາດ້ານສຸຂະພາບຊຸມຊົນ ທີ່ເປັນຕົວແທນແກ່ທຸກຂະແໜງການຂອງຊຸມຊົນ ກໍຈະຊ່ອຍ ໄດ້ຫຼາຍເຊັ່ນກັນ.

ສິ່ງທີ່ຄວນຈຳ

ນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນຄວນໃຫ້ປະໂຫຍດແກ່ເດັກຍິງ ແລະ ເດັກຊາຍ ຈາກ**ທຸກໆ** ກຸ່ມ ຂອງສັງຄົມບໍ່ພຽງແຕ່ສະເພາະ ຜູ້ທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງ. ນະໂຍບາຍຕ່າງໆທີ່ກ່າວເຖິງຄວາມຕ້ອງການທີ່ຈຳເປັນຂອງເດັກທຸກຄົນ ຈະມີແນວໂນ້ມໄດ້ຮັບການສະໜັບສະໜູນຫຼາຍທີ່ສຸດ ແລະ ຈະປະສົບຜົນສຳເລັດທີ່ສຸດ. ການປະຕິບັດນະໂຍບາຍທີ່ແຍກເປັນປະເພດຂອງເດັກຈະເສຍເວລາ ແລະ ມີຄ່າໃຊ້ຈ່າຍແພງ ແລະ ມັນສາມາດເປັນຕົ້ນເຫດຂອງຄວາມຂັດແຍ່ງ.

5. ການປະເມີນຜົນ ແລະ ການຕິດຕາມສະຖານະພາບດ້ານນະໂຍບາຍ ສຸຂະພາບໃນໂຮງຮຽນ.

5.1 ການປະເມີນຜົນ ແລະ ຕິດຕາມນະໂຍບາຍຂອງໂຮງຮຽນ.

ຄຳຖາມກວດກາຂ້າງລຸ່ມນີ້ ຖືກອອກແບບເພື່ອກຳນົດ:

(ກ) ຖ້າວ່ານະໂຍບາຍສົ່ງເສີມສຸຂະພາບ ໃນໂຮງຮຽນໄດ້ປະກາດໃຊ້ແລ້ວ; ຖ້າຍັງ, ຈຳເປັນຕ້ອງ ປະກາດ;

(ຂ) ຖ້ານະໂຍບາຍຫາກໄດ້ປະກາດໃຊ້ແລ້ວ,ໂຮງຮຽນມີ ຫຼື ບໍ່ມີ ແຜນງານ/ ໂຄງການທີ່ມີປະສິດ ທິຜົນເພື່ອປະຕິບັດ; ຖ້າຫາກບໍ່ມີປະຕິບັດການອັນໃໝ່ ຈຳເປັນຕ້ອງໄດ້ພັດທະນາຂຶ້ນ. ຄຳຖາມກວດກາ ນີ້ບໍ່ໄດ້ ເປັນສິ່ງສົມບູນແລ້ວ, ທ່ານອາດຕ້ອງການເພີ່ມເຕີມກໍໄດ້

ໂຮງຮຽນຂອງພວກທ່ານມີນະໂຍບາຍຕໍ່ຕ້ານການຈຳແນກທີ່ຈະຮັບປະກັນເລື່ອງຕໍ່ໄປນີ້: (ໃຫ້ກວດເບິ່ງ ຖ້າມີໃຫ້- ໝາຍ ✓)

_____ ມີການເຄົາລົບສິດທິມະນຸດແລະໃຫ້ໂອກາດ ແລະ ປະຕິບັດຕໍ່ກັນຢ່າງສະເໝີພາບ ໂດຍບໍ່ ຄຳນຶງເຖິງຄຸນລັກສະທາງເພດ,ຮ່າງກາຍ, ສະຕິປັນຍາ, ອາລົມຈິດ, ພາສາ ຫຼື ລັກສະນະ ອື່ນໆບໍ່?.

_____ ມີການປ້ອງກັນການລວນລາມ ຫຼື ທາລຸນທາງເພດຈາກນັກຮຽນຜູ້ອື່ນ ຫຼື ພະນັກງານ, ຄູ ອາຈານ ແລະ ມີມາດຕະການທາງລະບຽບວິໄນທີ່ມີປະສິດທິຜົນຕໍ່ຜູ້ກະທຳຜິດບໍ່?

_____ ມີສິ່ງອຳນວຍຄວາມສະດວກ ສຳລັບນັກຮຽນພິການ ເພື່ອໃຫ້ເຂົ້າສາມາດເຂົ້າເຖິງຫ້ອງຮຽນ ແລະ ອາຄານສະຖານທີ່ ທີ່ຈຳເປັນສຳລັບການຮຽນຮູ້ ກ່ຽວກັບສະພາບແວດລ້ອມທີ່ຖືກ ສຸຂະລັກສະນະບໍ່?

_____ ເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງໄດ້ຮັບການສຶກສາທີ່ມີຄຸນນະພາບ ເຊັ່ນ: ເດັກຍິງ, ເດັກກຳພ້າ, ເດັກຊົນເຜົ່າ ແລະ ເດັກທີ່ຢູ່ໃນພາວະວິກິດ ຫຼື ຄອນແຄນບໍ່?

_____ ພະນັກງານ,ຄູອາຈານເປັນຜູ້ມີຄວາມກຽມພ້ອມ,ໃຫ້ການສະໜັບສະໜູນແລະເອົາໃຈໃສ່ດູ ແລຢ່າງເທົ່າທຽມບໍ່?

ໂຮງຮຽນຂອງພວກທ່ານມີນະໂຍບາຍຕໍ່ຕ້ານ ຄວາມຮຸນແຮງ ແລະ ສິ່ງເສບຕິດທີ່ຮັບປະກັນເລື່ອງຕໍ່ ໄປນີ້: (ໃຫ້ກວດເບິ່ງ ຖ້າມີ - ໝາຍ ✓)

_____ ໂຮງຮຽນມີຄວາມປອດໄພ, ສົ່ງເສີມສຸຂະພາບ ແລະ ມີການປົກປ້ອງເຊິ່ງເປັນບ່ອນທີ່ມີ ສະພາບແວດລ້ອມທັງທາງກາຍະພາບ ແລະຈິດຕະ-ສັງຄົມທີ່ກະຕຸກຊຸກຍູ້ການຮຽນຮູ້ບໍ່?

_____ ມີການລົງໂທດໜັກຕໍ່ຜູ້ໃຊ້ຄວາມຮຸນແຮງ ຫຼື ຂົ່ມເຫັງ; ຫ້າມມີອາວຸດໃດໆພາຍໃນໂຮງ ຮຽນບໍ່?

_____ ມີສະພາບແວດລ້ອມທີ່ປອດຢາເສບຕິດ, ຂອງມຶນເມົາ(ເຫຼົ້າ-ເບຍ) ແລະ ຢາສູບບໍ່?

ໂຮງຮຽນຂອງພວກທ່ານມີນະໂຍບາຍກ່ຽວກັບການຈັດຫານ້ຳສະອາດ, ສຸຂະອະນາໄມ ແລະ ສະພາບແວດລ້ອມທີ່ຮັບປະກັນ ເລື່ອງຕໍ່ໄປນີ້: (ໃຫ້ກວດເບິ່ງ ຖ້າມີ - ໝາຍ ✓)

_____ ມີການສະໜອງນ້ຳສະອາດພຽງພໍ ແລະ ງ່າຍເພື່ອນຳໃຊ້ ແລະ ຖືກເກັບຮັກສາໄວ້ເປັນຢ່າງດີ (ໂດຍສະເພາະນ້ຳດື່ມ ແລະ ນ້ຳໃຊ້ລ້າງມື) ບໍ່?

_____ ມີວິດຖ່າຍທີ່ແຍກສຳລັບຄູຍິງແລະຄູຊາຍ ລວມທັງສຳລັບເດັກຍິງແລະ ເດັກຊາຍດ້ວຍບໍ່?

_____ ມີຈຳນວນວິດຖ່າຍພຽງພໍບໍ່?

_____ ມີການບໍລິຫານ ຈັດການກັບຂີ້ເຫຍື້ອ ແລະ ສິ່ງເສດເຫຼືອອື່ນໆຢ່າງເໝາະສົມບໍ່?

_____ ມີການບຳລຸງຮັກສາອາຄານສະຖານທີ່ເກັບຮັກສານ້ຳ ແລະ ການສຸຂະອະນາໄມຢ່າງເໝາະສົມບໍ່?

_____ ມີການໃຫ້ການ ສຶກສາ ແລະ ເຂົ້າໃຈກົນໄກການນຳສິ່ງເສດເຫຼືອ ຫຼື ສິ່ງທີ່ເປັນຂີ້ເຫຍື້ອກັບມາໃຊ້ຄືນໃໝ່ບໍ່?

ໂຮງຮຽນຂອງພວກທ່ານມີນະໂຍບາຍສົ່ງເສີມການໃຫ້ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານທີ່ຮັບປະກັນເລື່ອງຕໍ່ໄປນີ້: (ໃຫ້ກວດເບິ່ງ ຖ້າມີ - ໝາຍ ✓)

_____ ມີການໃຫ້ການສຶກສາແກ່ເດັກຍິງ ແລະ ເດັກຊາຍທີ່ເໝາະສົມກັບສ່ຳອາຍຸ, ທັກສະພື້ນຖານດ້ານສຸຂະພາບແລະການດຳລົງຊີວິດເປັນພາກສ່ວນປົກກະຕິພາກສ່ວນໜຶ່ງຂອງຫຼັກສູດການສຶກສາຂັ້ນພື້ນຖານບໍ່?.

_____ ມີແຜນງານ/ໂຄງການຕ່າງໆເພື່ອປ້ອງກັນ ຫຼື ຫຼຸດຜ່ອນພຶດຕິກຳສ່ຽງຕໍ່ການຖືພາທີ່ບໍ່ເພິ່ງປາຖະໜາ, ເອັດໄອວີ/ເອດສ໌ ແລະ ອື່ນໆບໍ່?

_____ ມີການໃຫ້ການສະໜັບສະໜູນແລະການແນະແນວນັກຮຽນທີ່ໄດ້ຮັບຜົນກະທົບຈາກເອັດໄອວີ/ເອດສ໌

_____ ມີການຈັດການບໍລິການໃຫ້ເຍົາວະຊົນຂ້າງນອກແບບເປັນເພື່ອນມິດ ແລະ ກັບທີ່ເພື່ອແກ້ບັນຫາດ້ານສຸຂະພາບຂອງໄວລຸ້ນ ແລະ ໂດຍສະເພາະສຳລັບຜູ້ຍິງບໍ່?

ໂຮງຮຽນຂອງພວກທ່ານມີນະໂຍບາຍສົ່ງເສີມການບໍລິການສຸຂະພາບ ແລະ ໂພຊະນາການທີ່ຮັບປະກັນເລື່ອງຕໍ່ໄປນີ້: (ໃຫ້ກວດເບິ່ງ ຖ້າມີ - ໝາຍ ✓)

_____ ມີການເກັບຮັກສາບັນທຶກກ່ຽວກັບສຸຂະພາບໃນໂຮງຮຽນຂອງນັກຮຽນແຕ່ລະຄົນບໍ່?

_____ ມີການກວດສະຖານະພາບດ້ານສຸຂະພາບທົ່ວໄປ, ແຂ້ວ ແລະ ໂພຊະນາການສະມ່ຳສະເໝີບໍ່?

_____ ມີໂອກາດຢ່າງເທົ່າທຽມກັນໃນການເຝິກອອກກຳລັງກາຍ ແລະ ພັກຜ່ອນສຳລັບເດັກຍິງ ແລະ ເດັກຊາຍບໍ່?

_____ ມີການຊ່ວຍເຫຼືອສະໜັບສະໜູນແລະເຝິກອົບຮົມຄູເພື່ອສອນແລະສົ່ງຄວາມຮູ້ໃຫ້ເດັກຕໍ່ດ້ານ

ສຸຂະພາບແບບງ່າຍໆ ບໍ?

_____ ມີກົນໄກຕອບສະໜອງພາວະສຸກເສີນທີ່ທັນເວລາ ແລະ ມີປະສິດທິຜົນໃນກໍລະນີມີຜູ້ໄດ້ຮັບບາດເຈັບແລະ ເກີດໄພທຳມະຊາດ ບໍ?

_____ ເດັກດ້ອຍໂອກາດ ເຊັ່ນ: ເດັກທີ່ຂາດສານອາຫານເຂົ້າເຖິງອາຫານການກິນບໍ?

_____ ມີຂໍ້ກຳນົດກົດລະບຽບສຳລັບຜູ້ຂາຍອາຫານແລະມາດຕະຖານດ້ານຄຸນນະພາບ, ອະນາໄມ ຂອງອາຫານທີ່ບໍລິການຂາຍໃນໂຮງຮຽນບໍ່?

_____ ມີການເຂົ້າຮ່ວມຂອງຊຸມຊົນໃນການພັດທະນາ ແລະ ໃຫ້ການການສຶກສາ ແລະບໍລິການດ້ານສຸຂະພາບທີ່ຕັ້ງເປົ້າໄປສູ່ເດັກກ່ອນໄວຮຽນ ແລະເດັກໃນໄວຮຽນ ບໍ?

ສິ່ງທີ່ຄວນຈຳ:

ໃຫ້ດຳເນີນການແບບຄ່ອຍເປັນຄ່ອຍໄປ! ຈົ່ງຫວະຂອງການຜັນຂະຫຍາຍນານະໂຍບາຍ ແລະ ການນຳເອົາຄວາມປ່ຽນແປງ ເຂົ້າມາຄວນຈະດຳເນີນໄປແບບຊ້າໆ ເພື່ອວ່າຄົນທີ່ເຂົ້າຮ່ວມມີຄວາມຮູ້ສຶກສະບາຍໃຈ ກັບການປ່ຽນແປງ ແລະ ເຂົ້າໃຈດີເຖິງຄວາມຕ້ອງການທີ່ຈຳເປັນ ໃນການປ່ຽນແປງ.

6. ການແກ້ໄຂບັນຫາຄວາມຮຸນແຮງແລະ ການຫັນນະໂຍບາຍສູ່ການປະຕິບັດ

ເມື່ອເຂົ້າໂຮງຮຽນແລ້ວ, ເດັກທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງຈາກໝູ່ ມັກຈະເປັນຜູ້ທີ່ຖືກຈຳແນກ ແລະ ພົບກັບຄວາມຮຸນແຮງສະເໝີ. ສ່ວນໃຫຍ່ຈະຖືກເລັ່ງໃສ່ “ຄວາມແຕກຕ່າງ” ຂອງເຂົາຈາກຜູ້ອື່ນໆ ແລະ ຈະຫາທາງຜັກດັນໃຫ້ເຂົາອອກຫ່າງຈາກໝູ່ໃນໂຮງຮຽນ ແລະ ຢູ່ນອກໂຮງຮຽນເປັນບາງຄັ້ງ. ຮ້າຍແຮງໄປກວ່ານັ້ນ ສິ່ງດັ່ງກ່າວຈະພົວພັນກັບການລວນລາມທາງ ເພດ ແລະການທຳຮ້າຍ ຮ່າງກາຍເຊິ່ງສາມາດນຳໄປສູ່ການເສຍຊີວິດ.

ຄວາມຮຸນແຮງສາມາດປະຕິບັດໄດ້ໃນຫຼາຍຮູບແບບ ແລະ ຖືກເຂົ້າໃຈຢ່າງແຕກຕ່າງກັນ ໃນວັດທະນະທຳທີ່ແຕກຕ່າງກັນ. ຢູ່ໃນຊຸດເຄື່ອງມືເຫຼັ້ມນີ້ ຄວາມຮຸນແຮງໝາຍເຖິງການໃຊ້ກຳລັງ ຫຼື ອຳນາດ ໂດຍເຈດຕະນາຂົ່ມຂູ່ຫຼືກະທຳຈິງຕໍ່ຕົນເອງ, ຜູ້ອື່ນຫຼືຕໍ່ກຸ່ມຫຼືຊຸມຊົນໃດໜຶ່ງ. ມັນຈະມີຜົນໃຫ້ເກີດການບາດເຈັບ, ເສຍຊີວິດ, ທຳລາຍທາງຈິດໃຈ, ການພັດທະນາທາງຮ່າງກາຍຊຸດໂຊມ ຫຼື ສູນ ເສຍການ ພັດທະນາ.

6.1 ຮູບແບບຂອງຄວາມຮຸນແຮງທີ່ເປັນພື້ນຖານ.

ກ. ຮູບແບບຂອງຄວາມຮຸນແຮງ

- **ຄວາມຮຸນແຮງຕໍ່ຕົນເອງ** ໝາຍເຖິງພຶດຕິກຳທີ່ມີເຈດຕະນາ ແລະ ທຳຮ້າຍຕົນເອງ ໂດຍກົງ. ສຳລັບເລື່ອງນີ້ການຂ້າຕົວຕາຍຈະນຳໄປສູ່ຜົນຮັບທີ່ເປັນຄວາມຕາຍ. ຮູບແບບອື່ນໆ ຈະປະກອບມີຄວາມພະຍາຍາມຂ້າຕົວຕາຍ ແລະ ພຶດຕິກຳຕ່າງໆ ທີ່ຕັ້ງໃຈທຳລາຍຕົວເອງ, ແຕ່ບໍ່ເຖິງຕາຍ (ເຊັ່ນ: ການທຳລາຍອະໄວຍະວະຮ່າງກາຍຂອງຕົນ).

- **ຄວາມຮຸນແຮງລະຫວ່າງບຸກຄົນ** ແມ່ນພຶດຕິກຳຮຸນແຮງລະຫວ່າງບຸກຄົນ ແລະ ສາມາດແຍກປະເພດໄດ້ດີທີ່ສຸດ ໂດຍການພົວພັນລະຫວ່າງຜູ້ເປັນເຫຍື່ອ-ຜູ້ກະທຳຜິດ. ຮູບແບບຕ່າງໆຂອງຄວາມຮຸນແຮງ ລະຫວ່າງບຸກຄົນປະກອບມີການຂົ່ມເຫັງ ແລະ ການລວນລາມທຳຮ້າຍ.

- **ຄວາມຮຸນແຮງທີ່ມີການຈັດຕັ້ງ** ແມ່ນພຶດຕິກຳຮຸນແຮງທີ່ສະແດງອອກໂດຍກຸ່ມສັງຄົມ ຫຼື ການເມືອງທີ່ໄດ້ຮັບແຮງຈູງໃຈຈາກຈຸດມຸ້ງໝາຍ ສະເພາະໃດໜຶ່ງທາງການເມືອງ, ເສຖະກິດ ຫຼື ສັງຄົມ. ຕົວຢ່າງໃນທີ່ນີ້ປະກອບມີ ຄວາມຂັດແຍ່ງທາງຜິວພັນ ຫຼື ສາສະໜາທີ່ເກີດຂຶ້ນລະຫວ່າງກຸ່ມ, ແກ໊ງ ຫຼື ກຸ່ມປະທ້ວງຕ່າງໆ.

ຂ. ສາເຫດຂອງຄວາມຮຸນແຮງ.

ສາເຫດຂອງຄວາມຮຸນແຮງຈະສະຫຼັບຊັບຊ້ອນ ແລະ ແຕກຕ່າງກັນໄປ ຢູ່ຂ້າງລຸ່ມນີ້ຈະເປັນບັນດາປັດໄຈຕ່າງໆ ທີ່ຄິດວ່າເປັນຕົວຊ່ວຍໃຫ້ກໍ່ເກີດພຶດຕິກຳຮຸນແຮງ. ທ່ານສາມາດໃຊ້ປັດໄຈເຫຼົ່ານີ້ ແລະ ຂະຫຍາຍມັນກວ້າງອອກໄປໄດ້ອີກ ເພື່ອປະເມີນເບິ່ງວ່າເດັກ ໃນໂຮງຮຽນຂອງທ່ານ, ຄອບຄົວ ແລະ ຊຸມຊົນ ມີເງື່ອນໄຂຈູງໃຈໃຫ້ກະທຳຄວາມຮຸນແຮງໄດ້ຢ່າງໃດ ແລະ ນະໂຍບາຍໂຮງຮຽນ ລວມທັງ ແຜນງານ/ໂຄງການມີຄວາມຈຳເປັນ ເພື່ອໜຸດຜ່ອນ ຫຼື ກຳຈັດມັນ ຫຼືບໍ່?

ສາເຫດຕ່າງໆ ຂອງຄວາມຮຸນແຮງ: ສິ່ງເຫຼົ່ານີ້ ມີຢູ່ໃນໂຮງຮຽນຂອງພວກທ່ານ ຫຼືບໍ່? [1] **ຄຸນລັກສະນະລະດັບເດັກ**

- ຍັງມີຂໍ້ຂາດຕົກບົກຜ່ອງດ້ານຄວາມຮູ້, ທັດສະນະຄະຕິ, ຄວາມຄິດກ່ຽວກັບຄວາມຮຸນແຮງ ແລະ ທັກສະ ເຊັ່ນ - ທັກສະການສື່ສານໄດ້ຮັບການພັດທະນາຕ່ຳ
- ເສບສິ່ງເສບຕິດ ແລະ ຂອງມຶນເມົາ (ເຫຼົ້າ/ເບຍ....)
- ເຄີຍເຫັນ ຫຼື ເຄີຍເປັນເຫຍື່ອຄວາມຮຸນແຮງລະຫວ່າງບຸກຄົນມາແລ້ວ
- ກ້າວເຂົ້າໄປເຖິງການນຳໃຊ້ປືນ ຫຼື ອາວຸດອື່ນໆ

ປັດໄຈທີ່ຊຸກຍູ້ສິ່ງເສີມໃນລະດັບຄອບຄົວ

- ຂາດຄວາມຮັກແພງ ແລະ ການສະໜັບສະໜູນຂອງພໍ່ແມ່ ຜູ້ປົກຄອງ
- ເຄີຍປະສົບພົບເຫັນຄວາມຮຸນແຮງໃນຄອບຄົວ
- ການລົງໂທດທາງດ້ານຮ່າງກາຍ ແລະ ການທາລຸນເດັກ
- ພໍ່ແມ່ ຜູ້ປົກຄອງ ຫຼື ອ້າຍເອື້ອຍນ້ອງມີສ່ວນຮ່ວມໃນພຶດຕິກຳທີ່ຜິດທາງອາຍາ

ປັດໄຈດ້ານຊຸມຊົນ ແລະ ສະພາບແວດລ້ອມອື່ນໆ ທີ່ສົ່ງເສີມຊຸກຍູ້ຄວາມຮຸນແຮງ

- ຄວາມບໍ່ເທົ່າທຽມກັນທາງເສດຖະກິດ - ສັງຄົມ, ການຫັນເປັນຕົວເມືອງ ແລະ

[1] ປັບຈາກ: World Health Organization (1998) WHO Information Series on School Health, Document Three- Violence Preventio : An Important Element of a Health- promoting School, Geneva

ຄວາມແອອັດຂອງປະຊາຊົນ

- ♦ ລະດັບການວ່າງງານສູງໃນໝູ່ຄົນໄວໜຸ່ມ
- ♦ ອິດທິພົນຂອງສື່
- ♦ ສະພາບແວດລ້ອມຂອງສັງຄົມທີ່ສະໜັບສະໜູນຄວາມຮຸນແຮງ
- ♦ ການມີພ້ອມຂອງອາວຸດຕ່າງໆ

ຄ. ການສ້າງແຜນທີ່ຂອງຄວາມຮຸນແຮງ

ພວກເຮົາຫຼາຍຄົນອາດຈະຄິດບໍ່ເຖິງວ່າໂຮງຮຽນ ແລະ ຊຸມຊົນຂອງພວກເຮົາເປັນສະຖານທີ່ ທີ່ມີຄວາມຮຸນແຮງ. ຖືວ່າເປັນໂຊກຮ້າຍທີ່ຄວາມຮຸນແຮງ ສ່ວນຫຼາຍເກີດຂຶ້ນ ໂດຍເຮົາສັງເກດບໍ່ໄດ້ ຍ້ອນວ່າ ໂດຍປົກກະຕິແລ້ວທັງຜູ້ເປັນເຫຍື່ອ ແລະ ຜູ້ກະທຳຜິດບໍ່ຢາກໃຫ້ຄູຂອງເຂົາຮູ້. ຍິ່ງໄປກວ່ານັ້ນ, ກໍລະນີຄວາມຮຸນ ແຮງອາດເກີດຂຶ້ນຢູ່ນອກໂຮງຮຽນ ເຊັ່ນ: ເມື່ອເດັກຖືກທຳລຸນເມື່ອເວລາໄປໂຮງຮຽນ, ຜົນກະທົບຂອງມັນຈະສະທ້ອນເຂົ້າໄປໃນໂຮງຮຽນ ແລະ ຫ້ອງຮຽນຂອງທ່ານ.

ການກຳນົດລະດັບຂອງຄວາມຮຸນແຮງໃນໂຮງຮຽນ ສາມາດທີ່ຈະເຮັດໄດ້ດ້ວຍຫຼາຍແນວທາງ ເຊັ່ນ: ໂດຍການຂໍໃຫ້ນັກຮຽນຕອບແບບສອບຖາມ, ດຶງເຂົ້າເຂົ້າມາຮ່ວມກຸ່ມສົນທະນາ ຫຼື ໂດຍຜ່ານການສ້າງແຜນທີ່ ຂອງຄວາມຮຸນແຮງ.

ການສ້າງແຜນທີ່ໂຮງຮຽນມີຈຸດມຸ້ງໝາຍ ເພື່ອກຳນົດວ່າບ່ອນໃດ ແລະ ເມື່ອໃດມີຄວາມຮຸນແຮງເກີດຂຶ້ນພາຍໃນໂຮງຮຽນ, ຄວາມຮຸນແຮງປະເພດໃດທີ່ກ່ຽວຂ້ອງ(ແບບກັບຕົນເອງ, ແບບລະຫວ່າງບຸກ ຄົນ ຫຼື ແບບຈັດຕັ້ງ), ແລະ ແມ່ນໃຜທີ່ເປັນເຫຍື່ອ ແລະ ເປັນຜູ້ກະທຳຜິດເປັນປະຈຳ. ຂະບວນການສ້າງແຜນທີ່ເປັນ ເຄື່ອງມືທີ່ມີຄຸນຄ່າ ສຳລັບການຕິດຕາມ ແລະ ຄວບຄຸມຄວາມຮຸນແຮງ ເພາະວ່າ ມັນສາມາດທີ່ຈະເຮັດໄດ້ດັ່ງນີ້:

1. ຊຸກຍູ້ນັກຮຽນ, ຄູ ແລະ ຜູ້ບໍລິຫານເພື່ອເລີ້ມການສົນທະນາ ກ່ຽວກັບ ຄວາມຮຸນແຮງໃນໂຮງຮຽນ ເຊິ່ງຈະນຳໄປສູ່ນະໂຍບາຍທີ່ມີປະສິດທິຜົນຫຼາຍຂຶ້ນ;
2. ຊ່ອຍໃນການປະເມີນຜົນແຜນງານ/ໂຄງການເຂົ້າແຊກແຊງແກ້ໄຂຄວາມຮຸນແຮງ ທີ່ຖືກສ້າງຂຶ້ນ ເພື່ອສະໜັບສະໜູນນະໂຍບາຍຕ້ານຄວາມຮຸນແຮງໃນໂຮງຮຽນ.
3. ເພີ້ມທະວີການເຂົ້າມີສ່ວນຮ່ວມຂອງໂຮງຮຽນ ໃນການແຊກແຊງເພື່ອແກ້ໄຂຄວາມຮຸນແຮງອື່ນໆ.

ເພື່ອສ້າງແຜນທີ່ຄວາມຮຸນແຮງໃນໂຮງຮຽນຂອງທ່ານ, ທ່ານສາມາດທີ່ຈະໃຊ້ຂະບວນການຄ້າຍຄືກັນກັບການສ້າງແຜນທີ່ໂຮງຮຽນຊຸມຊົນ ດັ່ງທີ່ໄດ້ສະເໜີມາກ່ອນແລ້ວ. ເລີ້ມຕົ້ນດ້ວຍການໃຫ້ແຜນທີ່ໂຮງຮຽນແກ່ຄູ ແລະ ນັກຮຽນ ຫຼື ພວກກ່ຽວສາມາດທີ່ຈະສ້າງແຜນທີ່ດ້ວຍຕົນເອງ ແລ້ວບອກໃຫ້ກຳນົດສະຖານທີ່ ທີ່ເຂົາຄິດວ່າມີຄວາມຮຸນແຮງເກີດຂຶ້ນ, ເມື່ອໃດ, ພາຍໃຕ້ເງື່ອນໄຂຫຍັງແດ່ ແລະ ແມ່ນໃຜໂດຍປົກກະຕິມັກຈະມີສ່ວນໄປກ່ຽວຂ້ອງ. ຈາກນັ້ນ, ທ່ານກໍສາມາດວິເຄາະແຜນທີ່ເຫຼົ່ານີ້ ເພື່ອກຳນົດຖິ່ນບັນຫາ ບ່ອນທີ່ເກີດຄວາມຮຸນແຮງ ຫຼື ໜ້າຈະເກີດຄວາມຮຸນແຮງຂຶ້ນ.

ນະໂຍບາຍ ແລະ ກິດຈະກຳແຊກແຊງທີ່ຄູເປັນຜູ້ລິເລີ້ມ ແລະ ໄດ້ຮັບການປະຕິບັດມີແນວໂນ້ມ ທີ່ຈະປະສົບຜົນ ສຳເລັດອັນຍິ່ງໃຫຍ່ ໃນການຫຼຸດຜ່ອນຄວາມຮຸນແຮງໃນໂຮງຮຽນ. ເຖິງຢ່າງໃດກໍຕາມ, ເດັກກໍຕ້ອງຖືກນຳເອົາເຂົ້າມີສ່ວນຮ່ວມເໝືອນກັນ. ການສົນທະນາກັບກຸ່ມ ຄວນຖືກນຳໄປສູ່ການສົນທະນາເຖິງບ່ອນໃດແດ່ທີ່ເປັນ "ຈຸດຮ້ອນແຮງ" ເຊິ່ງຕັ້ງຢູ່ໃນເຂດໂຮງຮຽນ, ເປັນຫຍັງເດັກຈຳນວນໜຶ່ງ ຈຶ່ງໄວຕໍ່ຄວາມ ຮຸນແຮງ ແລະ ຈະສາມາດເຮັດຫຍັງໄດ້ແດ່ ເພື່ອຫຼຸດຜ່ອນຄວາມຮຸນແຮງໃນພື້ນທີ່ດັ່ງກ່າວ ແລະ ໃນໝູ່ນັກຮຽນເຫຼົ່ານີ້.

ການເຝິກຫັດ ເພື່ອສ້າງແຜນທີ່ໂຮງຮຽນ-ຊຸມຊົນ ທີ່ໄດ້ນຳສະເໜີໃນເອກະສານເຫຼັ້ມກ່ອນ ສາມາດນຳໃຊ້ ໄດ້ໃນເອກະສານເຫຼັ້ມນີ້ເຊິ່ງເດັກໆ ຍັງສາມາດສະແດງໃຫ້ເຫັນທີ່ຕ່າງໆ ໃນຊຸມຊົນ ຂອງເຂົາວ່າມີບ່ອນໃດ ມັກເກີດຄວາມຮຸນແຮງຢູ່ເລື້ອຍໆ, ກ່ຽວຂ້ອງກັບຄວາມຮຸນແຮງຊະນິດໃດ, ຜູ້ໃດມັກຖືກເປັນ ເຫຍື່ອ ແລະ ເປັນຜູ້ທຳຮ້າຍຫຼາຍກວ່າໝູ່ທີ່ສຸດ

6.2 ສັນຍານເຕືອນສຳລັບເດັກທີ່ຖືກທາລຸນ

ບາງຄັ້ງເດັກຍິງ ແລະ ເດັກຊາຍຈະບໍ່ບອກໃຫ້ພວກເຮົາຮູ້ວ່າເຂົາເປັນເຫຍື່ອຂອງຄວາມຮຸນແຮງ ຫຼື ຢູ່ໃນພາວະວິກິດ. ເຂົາຈະສະແດງອອກໃຫ້ເຮົາເຫັນຫຼາຍກວ່າ. ເຖິງວ່າການປ່ຽນແປງໃນພຶດຕິກຳຂອງເດັກສາມາດຂຶ້ນ ຢູ່ກັບຫຼາກຫຼາຍເຫດຜົນກໍຕາມ, ບາງຄັ້ງມັນກໍເກີດຂຶ້ນ ຈາກຄວາມກົດດັນຂອງການທາລຸນທາງຮ່າງກາຍ ຫຼື ຄວາມຮູ້ສຶກທາງຈິດໃຈ. ຄູຜູ້ທີ່ຕື່ນຕົວຕໍ່ການປ່ຽນແປງເຫຼົ່ານີ້ ມັກຈະສາມາດເຂົ້າຊ່ວຍເຫຼືອສະຖານະການທີ່ມີການທາລຸນໄດ້. ຢູ່ຂ້າງລຸ່ມນີ້ຈະເປັນບັນຊີລາຍການຂອງຄຸນລັກສະນະພາຍນອກເຊິ່ງເດັກທີ່ຖືກທາລຸນອາດສະແດງ [2].

ເດັກທີ່ຖືກທາລຸນດ້ານຄວາມຮູ້ສຶກທາງຈິດໃຈ, ທາງຮ່າງກາຍ ມັກຈະສະແດງອອກ ດັ່ງນີ້:

- ♦ ຫວາດກົວທີ່ຈະພົວພັນກັບຜູ້ອື່ນ ຫຼື ເປັນຄົນໂອນອ່ອນຕາມຄຳສັ່ງຈົນເກີນໄປ
- ♦ ຖອນຕົວ, ກ້າວລ້າວ ຫຼື ຫ້າວຫັນຜິດປົກກະຕິ (ຢູ່ນິ້ງບໍ່ເປັນ) (hyperactive), ຫງຸດຫງິດ ຫຼື ເສຍເມີຍຕະຫຼອດ, ແຍກຕົວອອກຫ່າງ
- ♦ ບໍ່ສະແດງຄວາມມັກຄວາມຊອບ ຫຼື ສະແດງຄວາມມັກຄວາມຊອບເກີນປົກກະຕິ (ເຮັດໃຫ້ ເຂົ້າໃຈຜິດ ເມື່ອຖືກຍຸໂຍງໃຫ້ຫຼິ້ງໄຟ)

ອາການທາງຮ່າງກາຍ

- ♦ ຟົກຊ້ຳ, ຮອຍລວກໃໝ້, ຮອຍແຜແປ້ວ, ຮອຍຖືກຂ້ຽນຕີ, ກະດູກຫັກ, ບາດເຈັບຕໍ່ເນື່ອງ ຫຼື ບໍ່ສາມາດອະທິບາຍໃຫ້ເຂົ້າໃຈໄດ້
- ♦ ເປັນພະຍາດຕິດຕໍ່ທາງເພດສຳພັນ
- ♦ ເປັນຮອຍໄຄ່ບວມທີ່ອະໄວຍະວະເພດ ຫຼື ຮູກົ້ນ, ມີເລືອດໄຫຼ ຫຼື ຄັນ

[2] ທີ່ມາ: National Center for Assault Prevention (NCAP). Education, Information and Resource Center, Sewell, New Jersey, 2000. http:www.ncap.org/identity. htm. NCAP also has as international division with some materials translated in Spanish, French, Vietnamese, Cantonese, Romanian, Russian, and Japanese, Learn more about this at: http://ncap.org/cap_international.htm.

ຮ່ອງຮອຍເງື່ອນງຳທາງກິດຈະກຳ ແລະ ຄວາມເຄັຽຊິນຈົນເປັນນິໄສ

- ຝັນຮ້າຽ
- ຢ້ານກົວທີ່ຈະກັບເມືອເຮືອນ ຫຼື ໄປບາງສະຖານທີ່
- ຢ້ານກົວທີ່ຈະຢູ່ກັບບາງຄົນ
- ແລ່ນໜີ
- ຫຼີກລ້ຽງການປະຕິບັດໜ້າທີ່ (ມີພຶດຕິກຳຜິດໆທີ່ຄົນບໍ່ຍອມຮັບ)
- ຂີ້ຕົວະ

ພຶດຕິກຳບໍ່ເໝາະສົມກັບສ່ຳອາຍຸ

- ດູດຫົວໂປ້ມື
- ຮູ້ດີ ຫຼື ມີກິດຈະກຳທາງເພດສຳພັນ ລວມທັງ ການສຳສ່ອນທາງເພດ
- ຍ່ຽວໃສ່ບ່ອນ
- ເສບສິ່ງມຶນເມົາ ຫຼື ສິ່ງເສບຕິດອື່ນໆ
- ການທຳຮ້າຽເດັກທີ່ອ່ອນກວ່ຳ
- ເອົາວຽກທີ່ຜູ້ໃຫຍ່ຮັບຜິດຊອບໄປເຮັດ

ບັນຫາກ່ຽວຂ້ອງກັບການສຶກສາ

- ມີຄວາມຢາກຮູ້ຢາກເຫັນ, ມີຈິນຕະນາການສູງເກີນໄປ
- ຫຼີ້ນເຫຼືອທາງການສຶກສາ ຫຼື ວິຊາການ
- ນອນຫຼັບໃນຫ້ອງ
- ບໍ່ສາມາດທຳສະມາທິໄດ້**ຕົວ**

ຊີ້ບອກດ້ານຄວາມຮູ້ສຶກທາງຈິດໃຈ

- ມີຄວາມເສົ້ຳໃຈ
- ຫວາດກົວ, ຢ້ານຄວາມມືດ, ຢ້ານຫ້ອງນ້ຳສາທາລະນະ ແລະ ອື່ນໆ
- ເຈັບປ່ວຍຊຳເຮື້ອ
- ບາດເຈັບຍ້ອນທຳລາຍຕົວເອງ
- ເຮັດໃຫ້ສັດບາດເຈັບ ຫຼື ຂ້ຳສັດ
- ມີຄວາມຢ້ານກົວເກີນເຫດ
- ຂາດຄວາມຄ່ອງແຄ້ວ ແລະ ຂາດຫົວຄິດປະດິດສ້ຳງ

6.3 ສັນຍານເຕືອນສຳລັບເດັກທີ່ມີຄວາມສ່ຽງ

ເດັກຄົນອື່ນໆອາດຕົກຢູ່ໃນພາວະວິກິດໃນຄອບຄົວ, ຊຸມຊົນ ຫຼື ໂຮງຮຽນ. ໃນຂະນະທີ່ບໍ່ຖືກທຳລຸນໂດຍກົງ ພວກເຂົາອາດມີຄວາມຕ້ອງການ ການປົກປ້ອງພິເສດຈາກການພົວພັນລະຫວ່ຳງບຸກຄົນ ທີ່ມີການກົດດັນຫຼືການໃຊ້ສິ່ງເສບຕິດ. ສະພາວະຮອບຕົວສາມາດທີ່ຈະຊ່ວຍ ທ່ານ ກຳນົດເດັກເຫຼ່ຳນີ້ໄດ້. ຍິ່ງໄປກວ່ານັ້ນ ການໃຊ້ເຄື່ອງມືອື່ນໆ ກໍອາດມີຄຸນຄ່ຳເໝືອນກັນ ເຊັ່ນ:

ຊີວະປະຫວັດຂອງເດັກ ທີ່ນຳສະໜີໄວ້ກ່ອນໜ້າ ຈະໃຫ້ຂໍ້ມູນແກ່ທ່ານກ່ຽວກັບນັກຮຽນ ແລະ ສະພາບຄອບຄົວຂອງເຂົາລວມທັງ ບັນທຶກກ່ຽວກັບການສັງເກດພຶດຕິກຳຂອງນັກຮຽນ. ຢູ່ຂ້າງລຸ່ມນີ້ຈະເປັນຄຸນລັກສະນະບາງຢ່າງຂອງເດັກ ທີ່ຢູ່ໃນຄວາມສ່ຽງ ແລະ ເຮົາຈະສາມາດເຮັດສິ່ງໃດແດ່ເພື່ອຊ່ວຍເຂົາ.[3]

ວິທີກຳນົດ/ລະບຸ ແລະ ຊ່ວຍເຫຼືອເດັກທີ່ມີຄວາມສ່ຽງ

ເດັກນັກຮຽນອາດຢູ່ໃນພາວະສ່ຽງ ຖ້າມີການປະສົມປະສານຂອງບັນດາປັດໄຈ ດັ່ງລຸ່ມນີ້ເກີດຂຶ້ນ:

- ຄອບຄົວບໍ່ປະພຶດປະຕິບັດໜ້າທີ່ປົກກະຕິ.
- ພໍ່ແມ່ຕາຍ ຫຼື ພໍ່ແມ່ແຍກກັນຢູ່/ຢ່າຮ້າງ
- ພໍ່ແມ່ ຜູ້ປົກຄອງເສບສານເສບຕິດ ຫຼື ທໍລະມານຍ້ອນການປ່ວຍທາງຈິດ ມີພຶດຕິກຳທີ່ບໍ່ ເໝາະສົມ ຫຼືກ້າວລ້ວງໃນຫ້ອງຮຽນ
- ມີຄວາມຫຼົ້ມເຫຼວ ຫຼື ຂາດຄວາມຕັ້ງໃຈໄປໂຮງຮຽນ ມັກຂາດໂຮງຮຽນ, ຮຽນບໍ່ໄດ້.
- ມີທັກສະທາງດ້ານສັງຄົມຈຳກັດ, ບໍ່ຢາກອາຫານ , ມັກນອນ.
- ມີໝູ່ເພື່ອນທີ່ໃຊ້ສິ່ງມຶນເມົາ ຫຼື ສິ່ງເສບຕິດ ຫຼື ເຂົ້າຮ່ວມໃນພຶດຕິກຳທີ່ມີຄວາມສ່ຽງອື່ນໆອີກ
- ຖານະທາງເສດຖະກິດ-ສັງຄົມຕ່ຳ
- ທົດລອງໃຊ້ສານເສບຕິດແຕ່ຍັງເຍົາໄວ
- ມີທັດສະນະຄະຕິທີ່ຢາກໃຊ້ຢາເສບຕິດ,ສິ່ງມຶນເມົາຫຼືຢາສູບ**ສັນຍານຫຼືອາການດັ່ງຕໍ່ໄປນີ້ອາດຊີ້ບອກວ່າມີການຫຍຸ້ງກ່ຽວກັບສານເສບຕິດ:**

- ມີການປ່ຽນແປງບຸຄະລິກພາບຢ່າງເຫັນໄດ້ຊັດເຈນ, ອາລົມຜັນຜວນ
- ມີການປ່ຽນແປງດ້ານຮ່າງກາຍ ເຊັ່ນ : ນ້ຳໜັກລົດ ຫຼື ເພີ້ມ, ການເວົ້າບໍ່ແຈ້ງ, ການຍ່າງໂຊເຊ, ປະຕິກິລິຍາຕອບໂຕ້ເຊື່ອຊ້າ, ຍິ່ງຜະຫຍອງ, ເຫື່ອຕົກ, ເວົ້າຫຼາຍເກີນໄປ, ມີອາການເຄັ່ງເຄັ່ມ(ດີໃຈເກີນເຫດ), ຄື່ນໄສ້ ແລະ ຮາກ.
- ມີການປ່ຽນແປງໄປໃນຜົນການຮຽນ
- ລະມັດລະວັງໃນການຕິດຕໍ່ພົວພັນກັບຄົນອື່ນທາງໂທລະສັບ ຫຼື ລະມັດລະວັງໃນການນັດພົບ
- ມີຄວາມຈຳເປັນທີ່ກົດດັນດ້ານການເງິນ

ປັດໄຈບວກເຫຼົ່ານີ້ອາດຈະຊ່ວຍຫຼຸດຜ່ອນຜົນກະທົບຂອງປັດໄຈສ່ຽງ:

- ຄວາມຜູກພັນໃກ້ຊິດທີ່ແຂງແຮງ, ການເຂົ້າກ່ຽວພັນຂອງຄອບຄົວກັບຊີວິດຂອງເດັກ
- ຜົນສຳເລັດໃນໂຮງຮຽນ
- ທັກສະດ້ານສັງຄົມດີ

[3] ທີ່ມາ : Education Queensland. Identifying At Risk Students. http://education.gld.gov.au/health_safty/promotion /drug_education/html/m_risk.html

- ການເຂົ້າມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງຊຸມຊົນ
- ການພົວພັນທີ່ເປັນການເບິ່ງແຍງດູແລໂດຍຢ່າງນ້ອຍຈາກຜູ້ໃຫຍ່ໜຶ່ງຄົນ ເຊັ່ນ - ຄູ

ໂຮງຮຽນອາດສາມາດຊ່ອຍເຫຼືອໂດຍການເຮັດບາງຢ່າງ ຫຼື ເຮັດທັງໝົດທຸກຢ່າງ ດັ່ງຕໍ່ໄປນີ້:

- ຊຸກຍູ້ການພົວພັນທີ່ໃຫ້ການສະໜັບສະໜູນ ແລະ ມີຄວາມປອດໄພ
- ຮັບປະກັນການມາເຂົ້າໂຮງຮຽນປົກກະຕິ ແລະ ໄດ້ຮຽນຢ່າງມີຄວາມໝາຍ
- ພັດທະນາທັກສະສ່ວນບຸກຄົນ ແລະ ທັກສະດ້ານສັງຄົມ
- ພັດທະນາທັກສະດ້ານວິຊາການ
- ກໍ່ສ້າງເຄືອຂ່າຍສັງຄົມທີ່ສະໜັບສະໜູນ
- ຊຸກຍູ້ການມີຄ່ານິຍົມທາງບວກ
- ສອນໃຫ້ເຂົ້າໃຈວິທີເຂົ້າເຖິງຂໍ້ມູນຄວາມຮູ້
- ສົ່ງຄວາມຮູ້ຄວາມເຂົ້າໃຈວິທີຖ່ວງເວລາເພື່ອທີ່ຈະບໍ່ເຂົ້າຫຍຸ້ງກ່ຽວກັບສານເສບຕິດ ຫຼື ພຶດຕິ ກຳສ່ຽງຕ່າງໆ.
- ໃຫ້ຄວາມສະດວກ ເພື່ອເຂົ້າເຖິງການແນະແນວ.
- ສ້າງກຸ່ມສົນທະນາຢຸ່ໃນໂຮງຮຽນ ກ່ຽວກັບອັນຕະລາຍຕໍ່ຊີວິດໃນການໃຊ້ສານເສບຕິດ.

7. ແນວທາງເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ

ທ່ານສາມາດນຳໃຊ້ປະຕິບັດການຕ່າງໆ ດັ່ງຕໍ່ໄປນີ້ ເພື່ອຊ່ອຍການປ້ອງກັນຄວາມຮຸນແຮງໃນໂຮງຮຽນຂອງທ່ານ. [4]

1. ວາງຂອບເຂດຈຳກັດທີ່ແນ່ນອນ, ໝັ້ນຄົງ ກ່ຽວກັບ ພຶດຕິກຳກ້າວລ້ຳ ແລະ ໃຊ້ກຳລັງ ບັງຄັບຂູ່ເຂັນ.
2. ສອນເດັກເຍົາໄວໃຫ້ມີສຸຂະພາບດີ ແລະ ແບບແຜນພຶດຕິກຳທີ່ບໍ່ໃຊ້ຄວາມຮຸນແຮງ.
3. ຮຽນຮູ້ແລະນຳໃຊ້ແບບແຜນການນັບຖືລະບຽບວິໄນທີ່ມີປະສິດທິຜົນ, ບໍ່ໃຊ້ຄວາມຮຸນແຮງ ແລະ ເມື່ອເດັກປະພຶດປະຕິບັດຜິດພາດກໍຕັກເຕືອນແກ້ໄຂຢ່າງສະມ່ຳສະເໝີ.
4. ທ່ານເອງ ແລະ ຜູ້ອື່ນໆ ຕ້ອງເປັນແບບຢ່າງທີ່ດີມີປະສິດທິຜົນ ໃນການແກ້ບັນຫາ ໂດຍບໍ່ໃຊ້ຄວາມຮຸນແຮງ.
5. ປັບປຸງການສື່ສານກັບເດັກ (ເຊັ່ນ: ໃຫ້ເວລາແກ່ເດັກເພື່ອຮັບຟັງ).
6. ແນະນຳຊ່ອຍເຫຼືອການເຂົ້າມີສ່ວນຮ່ວມກັບສື່ຕ່າງໆ, ໂຮງຮຽນ, ກຸ່ມເພື່ອນດ້ວຍກັນ ແລະ ການ ຈັດຕັ້ງຂອງຊຸມຊົນ.
7. ຕັ້ງຄວາມຄາດຫວັງທີ່ເໝາະສົມສຳລັບເດັກທຸກຄົນ
8. ຊຸກຍູ້ ແລະ ຊົມເຊີຍເດັກເພື່ອຊ່ອຍເຫຼືອກັນ ແລະ ແກ້ບັນຫາໂດຍບໍ່ໃຊ້ຄວາມຮຸນແຮງ.

[4] ປັບມາຈາກ: World Health Organization (1998) WHO Information Series on School Health, Document Three- Violence Prevention: An important Element of a Health-Promoting School. Geneva.

9. ກຳນົດ / ລະບຸບັນຫາ ກ່ຽວກັບສານສ້າງຄວາມມຶນເມົາ, ສານເສບຕິດ ແລະ ສານອັນຕະລາຍອື່ນໆ.
10. ສອນກົນໄກການຮັບມືກັບບັນຫາທີ່ເໝາະສົມເພື່ອແກ້ພາວະວິກິດຕ່າງໆ
11. ຂໍຄວາມຊ່ວຍເຫຼືອຈາກຜູ້ຊ່ຽວຊານມືອາຊີບ (ກ່ອນທີ່ຈະສາຍເກີນໄປ)
12. ຊີ້ນຳນຳພາຄວາມພະຍາຍາມຂອງຊຸມຊົນ ເພື່ອດຳເນີນການວິເຄາະຄວາມຮຸນແຮງໃນໂຮງຮຽນ ແລະ ຊຸມຊົນ (ເຊັ່ນ: ດຳເນີນການໂດຍຜ່ານການເຝິກເຮັດແຜນທີ່) ແລະ ເພື່ອພັດທະນາ, ປະສານງານ ແລະ ປະຕິບັດການໃຫ້ບໍລິການທີ່ສະໜັບສະໜູນໂຮງຮຽນ - ຊຸມຊົນ ຢ່າງມີປະສິດທິຜົນ.
13. ໃຫ້ໂອກາດເດັກໄດ້ເຝິກປະຕິບັດທັກສະຊີວິດ, ໂດຍສະເພາະວິທີແກ້ໄຂບັນຫາ ໂດຍບໍ່ໃຊ້ຄວາມຮຸນແຮງ.

ບົດທີ 2
ການສອນທັກສະຕ່າງໆແກ່ເດັກເພື່ອການດຳລົງຊີວິດ

1. ການສອນທັກສະພື້ນຖານດ້ານສຸຂະສຶກສາ.

ເດັກທຸກຄົນໂດຍສະເພາະເດັກທີ່ມີພື້ນຖານ ແລະ ຄວາມສາມາດແຕກຕ່າງຫຼາກຫຼາຍ ມີຄວາມຕ້ອງການທັກສະຕ່າງໆທີ່ຈຳເປັນ ເພື່ອຈະສາມາດໃຊ້ຄວາມຮູ້ ກ່ຽວກັບສຸຂະພາບຂອງ ເຂົາປະຕິບັດໃຫ້ ເປັນນິໄສເຄີຍຊິນ ແລະ ຫຼີກລ້ຽງຄວາມເຄີຍຊິນທີ່ທຳລາຍສຸຂະພາບ. ແນວທາງ ໜຶ່ງ ເພື່ອສອນທັກສະ ເຫຼົ່ານີ້ ແມ່ນ "ການໃຫ້ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານ". [5]

ໂຮງຮຽນສ່ວນໃຫຍ່ຈະສອນບາງຮູບແບບ ກ່ຽວກັບ ສຸຂະສຶກສາ. ແຕ່ວ່າ ການສອນສຸຂະ ສຶກສາ ທີ່ອີງໃສ່ທັກສະພື້ນຖານມີຄວາມແຕກຕ່າງຈາກວິທີການອື່ນໆ ເພື່ອສອນສຸຂະສຶກສາຄື ແນວໃດ?

- ການສອນສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານຈະເນັ້ນໃສ່ການປ່ຽນແປງ **ພຶດຕິກຳທີ່ຖືກສຸຂະ ລັກສະນະອັນສະເພາະເຈາະຈົງ** ໃນແງ່ຂອງຄວາມຮູ້, ທັດສະນະ ຄະຕິ ແລະ ທັກສະ. ສິ່ງເຫຼົ່ານີ້ ຈະຊ່ວຍເດັກເພື່ອຄັດເລືອກ ແລະ ເຝິກປະຕິບັດ (ບໍ່ແມ່ນຮຽນແບບເຜີນໆ) ພຶດຕິກຳທີ່ຖືກສຸຂະລັກສະນະ.
- ແຜນງານ/ໂຄງການການສອນສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານ **ຖືກວາງແຜນຕາມຄວາມຕ້ອງການທີ່ຈຳເປັນແລະສິດທິຂອງນັກຮຽນ.** ສະນັ້ນ, ມັນຈຶ່ງ ສອດຄ່ອງກັບຊີວິດປະຈຳວັນ ຂອງຄົນໜຸ່ມທັ້ງຫຼາຍ.
- ມີ **ຄວາມດຸ່ນດ່ຽງ** ໃນຫຼັກສູດ:
  1. ຄວາມຮູ້ ແລະ ຂໍ້ມູນຂ່າວສານ.
  2. ທັດສະນະຄະຕິ ແລະ ຄ່ານິຍົມ
  3. ທັກສະຊີວິດ.ຈຸດມຸ້ງໝາຍກໍ ເພື່ອແນໃສ່**ການທັນຄວາມຮູ້ເຂົ້າໃນການກະທຳທັນ ທີທັນໃດ.**
- ແທນທີ່ຈະເປັນຜູ້ຮັບຂໍ້ມູນຄວາມຮູ້ແບບບໍ່ມີສ່ວນຮ່ວມ(ແບບເມີນເສີຍ), ເດັກມີສ່ວນ ຮ່ວມຢ່າງຫ້າວຫັນ ໃນການຮຽນຮູ້ ໂດຍຜ່ານວິທີການສິດສອນ ແລະ ການຮຽນຮູ້ແບບ ມີສ່ວນຮ່ວມ.
- ແຜນງານເຊັ່ນນີ້ **ຈະຕອບສະໜອງບົດບາດຍິງ-ຊາຍ**, ໝາຍຄວາມວ່າມັນຈະກ່າວ ເຖິງຄວາມຕ້ອງການ ແລະ ບັນຫາຂໍ້ຈຳກັດຂອງເດັກຍິງ ແລະ ເດັກຊາຍ.

[5] ພາກນີ້ແມ່ນໄດ້ດັດປັບມາຈາກ: www.unicef.org/programme/lifeskills/whatwhy/distinguish.html

ຢູ່ໃນການສອນສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານນີ້, ເດັກຈະເຂົ້າຮ່ວມໃນການຈັດກຸ່ມ ປະສົບຂອງການຮຽນຮູ້ ເພື່ອພັດທະນາຄວາມຮູ້, ທັດສະນະຄະຕິ ແລະ ທັກສະຊີວິດ. ທັກສະ ເຫຼົ່ານີ້ຈະຊ່ວຍ ໃຫ້ເດັກຮຽນຮູ້ວິທີການຕັດສິນໃຈທີ່ຖືກຕ້ອງ ແລະ ດຳເນີນການໃນທາງທີ່ຖືກຕ້ອງ ເພື່ອຮັກສາຕົນເອງ ໃຫ້ມີສຸຂະພາບດີ ແລະ ມີຄວາມປອດໄພ. ທັກສະເຫຼົ່ານີ້ສາມາດເຝິກປະຕິ ບັດໄດ້, ທັກສະ"ທີ່ໃຊ້ກະທຳ" ເຊັ່ນ: ການຮູ້ຈັກວິທີປະຖິ້ມພະຍາບານ. ມັນຍັງສາມາດເປັນແນວ ທາງຂອງການຄົ້ນຄິດເຊັ່ນ: ວິທີຄົ້ນ ຫາ ຫຼື ແກ້ໄຂບັນຫາຕ່າງໆ ຫຼື ແນວທາງການສື່ສານ, ແນວ ທາງການສະແດງຄວາມຮູ້ສຶກ ແລະ ແນວ ທາງການປະພຶດປະຕິບັດ ທີ່ຊ່ວຍ ໃຫ້ເດັກໄດ້ເຮັດວຽກ ຮ່ວມກັນກັບຜູ້ອື່ນ ໂດຍສະເພາະກັບເດັກທີ່ມີພື້ນ ຖານ ແລະ ຄວາມສາມາດທີ່ແຕກຕ່າງ.

ທັກສະເຫຼົ່ານີ້ມັກຈະເອີ້ນກັນວ່າ **ທັກສະຊີວິດ** ຍ້ອນວ່າມັນມີຄວາມສຳຄັນ ສຳລັບການ ດຳລົງຊີວິດຢູ່ ໂດຍປາສະຈາກໂລກໄພໄຂ້ເຈັບ ແລະ ມີຄວາມສຸກ. ການສອນທັກສະຊີວິດເຫຼົ່ານີ້ ບາງຄັ້ງ ກໍເອີ້ນວ່າ "ການໃຫ້ສຸຂະສຶກສາທີ່ອີງໃສ່ທັກສະຊີວິດພື້ນຖານ" ມັນເປັນຄຳເວົ້າທີ່ມັກໃຊ້ ສະຫຼັບກັນກັບ ການສອນສຸຂະສຶກສາ ທີ່ອີງໃສ່ທັກສະພື້ນຖານ. ຄວາມແຕກຕ່າງ ລະຫວ່າງ ສອງ ຄຳເວົ້າ ແມ່ນຕ່າງກັນ ຢູ່ບ່ອນຂະນິດຂອງເນື້ອໃນ ຫຼື ຫົວຂໍ້ທີ່ມັນກວມເອົາ. ບໍ່ແມ່ນທຸກໆເນື້ອໃນ ຈະເປັນ "ເນື້ອໃນກ່ຽວຂ້ອງກັບ ສຸຂະພາບ", ຕົວຢ່າງ: ທັກສະຊີວິດພື້ນຖານກ່ຽວກັບການຮຽນຮູ້ ໜັງສື ແລະ ການຄຳນວນ ຫຼື ທັກສະ ຊີວິດ ພື້ນຖານ ກ່ຽວກັບ ການສຶກສາດ້ານສັນຕິພາບ. [6]

ຄຳວ່າ "ທັກສະຊີວິດ" ຈະໝາຍເຖິງກຸ່ມໃຫຍ່ໆຂອງບັນດາທັກສະດ້ານຈິດຕະ-ສັງຄົມ ແລະ ການພົວພັນລະຫວ່າງຄົນ ທີ່ສາມາດຊ່ວຍໃຫ້ເດັກສ້າງການຕັດສິນໃຈແບບໃຊ້ຂໍ້ມູນຄວາມ ຮູ້, ສື່ສານຢ່າງມີປະສິດທິຜົນ ແລະ ພັດທະນາທັກສະການແກ້ບັນຫາ ແລະ ບໍລິຫານຕົນເອງ ທີ່ຈະສາມາດຊ່ວຍ ໃຫ້ພວກເຂົາເນຳພາການດຳລົງຊີວິດທີ່ຖືກສຸຂະລັກສະນະ ແລະ ມີການຜະລິດ ທີ່ໄດ້ຜົນດີ. ທັກສະຊີວິດ ອາດມີຈຸດມຸ້ງໝາຍແນໃສ່ການພັດທະນາການປະຕິບັດງານ ສ່ວນບຸກ ຄົນ ແລະ ການປະຕິບັດງານກັບຜູ້ອື່ນໆ ລວມທັງ ການປະຕິບັດງານ ເພື່ອປ່ຽນແປງສະພາບ ແວດລ້ອມອ້ອມຂ້າງ ເພື່ອສ້າງສຸຂະພາບ ໃຫ້ແຂງແຮງດີ.

ທັກສະຊີວິດຍັງເຊື່ອມສຳພັນກັບການພັດທະນາທັດສະນະຄະຕິທີ່ດີ. ຕົວຢ່າງ: ໜຶ່ງ ໃນ ບັນດາທັກສະທີ່ສຳຄັນທີ່ສຸດເຊິ່ງເດັກໆ ຄວນຮຽນຮູ້ແມ່ນທັກສະຂອງການຮັບຟັງຄົນອື່ນ. ເມື່ອ ທ່ານຮັບຟັງພວກເຂົາ, ທ່ານຈະສະແດງອອກຄວາມນັບຖືເຂົາ ເຊິ່ງມັນເປັນທັດສະນະຄະຕິອັນ ໜຶ່ງ. 4 ທັດສະນະຄະຕິ ທີ່ສຳຄັນທີ່ສຸດ ເຊິ່ງຈຳເປັນຕ້ອງໄດ້ຮັບການພັດທະນາ ໂດຍຜ່ານການ ໃຫ້ສຸຂະສຶກສາທີ່ອີງໃສ່ທັກສະພື້ນ ຖານປະກອບມີສິ່ງດັ່ງຕໍ່ໄປນີ້: [7]

1. ການເຄົາລົບຕົນເອງ ເຊັ່ນ - ຢາກເປັນຄົນສະອາດ ແລະ ສຸຂະພາບດີ.

[6] ພາກນີ້ແມ່ນໄດ້ດັດປັບມາຈາກ: www.unicef.org/programme/lifeskills/ whatwhy/define.html

[7] Son V, Pridmore P, Nga B, My D and Kick P (2002) Renovating the Teaching of Health in Multigrade Primary Schools, A teacher's Guide to Health in Natural and Social Science (Grades 1,2,3) and Science (Grade 5). British Council and the National Institute of Educational Sciences: Hanoi, Vietnam

2. ມີຄວາມພາກພູມໃຈ ແລະ ເຊື່ອໝັ້ນຕົນເອງເຊັ່ນ: ສາມາດເຮັດໃຫ້ສຸຂະພາບຂອງຄອບຄົວຕົນ ເອງດີຂຶ້ນກວ່າເກົ່າ ເຖິງວ່າຕົວເອງຈະຍັງເປັນເດັກຢູ່.
3. ນັບຖືຄົນອື່ນ ເຊັ່ນ: ຈຳເປັນຕ້ອງຟັງຜູ້ອື່ນໆ, ນັບຖືເຂົາ, ແລະ ຂະນົບທຳນຽມຂອງເຂົາ ເຖິງວ່າເຂົາຈະມີຄວາມແຕກຕ່າງຈາກຕົນເອງ ຫຼື ເມື່ອຕົນເອງບໍ່ສາມາດເຫັນດ້ວຍກັບ ເຂົາກໍຕາມ.
4. ເປັນຫ່ວງເປັນໄຍຜູ້ອື່ນ ເຊັ່ນ: ຈະພະຍາຍາມ ເພື່ອຊ່ວຍຜູ້ອື່ນໃຫ້ກາຍເປັນຄົນມີສຸຂະ ພາບດີຂຶ້ນ, ໂດຍສະເພາະຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຈາກຕົນເອງ. ການພັດທະນາ ທັດສະນະຄະຕິທີ່ສົ່ງ ເສີມຄວາມສະເໝີພາບທາງເພດ ແລະ ນັບຖືກັນໃນໝູ່ເດັກຍິງ ແລະ ເດັກຊາຍລວມທັງການພັດທະນາທັກສະສະເພາະເຊັ່ນ:"ການແກ້ໄຂບັນຫາຄວາມກົດດັນ ໃນໝູ່ເພື່ອນດ້ວຍກັນ,ອັນເປັນຈຸດສູນກາງຂອງການໃຫ້ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານທີ່ມີປະສິດທິຜົນ.ເມື່ອເດັກໄດ້ຮຽນຮູ້ທັກສະເຊັ່ນ ນັ້ນແລ້ວ ພວກເຂົາຈະມີແນວໂນ້ມ ທີ່ ຈະໃຊ້ ແລະ ເຮັດໃຫ້ແບບແຜນດຳລົງ ຊີວິດຍືນຍົງໃນຊ່ວງເວລາຂອງການ ເຂົ້າໂຮງຮຽນ ແລະ ຕະຫຼອດຊີວິດຫຼັງການຮຽນຈົບ.

2. ທັກສະທີ່ຈຳເປັນໃນການຮຽນຮູ້

ບໍ່ມີບັນຊີລາຍການທັກສະຊີວິດທີ່ກຳນົດແນ່ນອນ. ຢູ່ຕາຕະລາງຂ້າງລຸ່ມຈະມີບັນຊີລາຍ ການທັກສະຊີວິດທີ່ໂດຍທົ່ວໄປແລ້ວເຫັນວ່າສຳຄັນ [8] . ທັກສະໃດກໍຕາມທີ່ຖືກຄັດເລືອກ ແລະ ຖືກ ເນັ້ນໜັກຈະຂຶ້ນ ຢູ່ກັບຫົວຂໍ້, ສະຖານະພາບຂອງໂຮງຮຽນ ແລະ ຊຸມຊົນຂອງທ່ານ ແລະ ສຳຄັນທີ່ສຸດ ແມ່ນຂຶ້ນກັບຄວາມ ຈຳເປັນຂອງນັກຮຽນ. ເຖິງວ່າປະເພດຕ່າງໆ ຂອງທັກສະທີ່ລົງບັນຊີໄວ້ໃນຕາຕະ ລາງໄດ້ແຍກກັນກໍຕາມ, ທີ່ຈິງ ແລ້ວມັນຊ້ຳຊ້ອນກັນ. ຕົວຢ່າງ: ການເຮັດການຕັດສິນໃຈ ມັກຈະ ກ່ຽວໂຍງກັບການຄົ້ນຄິດແບບປະດິດສ້າງ ແລະ ແບບວິເຄາະວິຈານ ("ອັນໃດຄືທາງເລືອກຂອງຂ້ອຍ?") ແລະ ການເຮັດໃຫ້ຄ່ານິຍົມ ຫຼື ຄຸນຄ່າມີຄວາມ ແຈ່ມແຈ້ງ ("ອັນໃດສຳຄັນ ສຳລັບຂ້ອຍ?"). ໃນທີ່ສຸດເມື່ອທັກສະເຫຼົ່ານີ້ດຳເນີນຮ່ວມກັນ, ການປ່ຽນແປງໃນພຶດຕິກຳທີ່ມີພະລັງຈະສາມາດເກີດຂຶ້ນ ໄດ້, ໂດຍສະເພາະ ເມື່ອໄດ້ຮັບການສະໜັບສະໜູນຈາກຍຸດທະສາດດ້ານອື່ນໆ ເຊັ່ນ: ນະໂຍບາຍໂຮງ ຮຽນ, ການບໍລິການສຸຂະພາບ ແລະ ສື່ຕ່າງໆ.

ທັກສະການສື່ສານ ແລະ ການພົວພັນລະຫວ່າງຄົນ	**ທັກສະໃນການຕັດສິນໃຈ ແລະ ການຄົ້ນຄິດແບບວິພາກວິຈານ**	**ທັກສະໃນການແກ້ໄຂ ແລະ ບໍລິ ຫານຈັດການດ້ວຍຕົນເອງ**
ທັກສະການສື່ສານ ແລະ ການພົວພັນລະຫວ່າງຄົນ • ການສື່ສານທາງປາກ ຫຼືບໍ່	**ທັກສະໃນການຕັດສິນໃຈ ແລະ ການຄົ້ນຄິດແບບວິພາກວິຈານ** • ທັກສະໃນການເກັບກຳຂໍ້ມູນ	**ທັກສະໃນການແກ້ໄຂ ແລະ ບໍລິ ຫານຈັດການດ້ວຍຕົນເອງ** • ທັກສະໃນການສ້າງຄວາມ

[8] ສ່ວນນີ້ພັດທະນາຈາກ: www.unicef.org/programme/lifeskills/whatwhy/skills.html

ແມ່ນທາງປາກ • ການຟັງແບບຕັ້ງໜ້າ • ການສະແດງອອກ ຄວາມຮູ້ສຶກ; ການສ່ອງແສງປາສະ ຈາກການກ່າວຫາ) ແລະ ຮັບ ເອົາການສ່ອງແສງ **ທັກສະໃນການເຈລະຈາ/ ການປະຕິເສດ** • ການເຈລະຈາຕໍ່ລອງ ແລະ ບໍລິຫານຂໍ້ຂັດ ແຍ່ງ • ທັກສະໃນການຢືນຢັນ • ທັກສະໃນການປະຕິເສດ **ເຂົ້າໃຈຄວາມຮູ້ສຶກຂອງ ຄົນອື່ນ** • ມີຄວາມສາມາດຟັງ ແລະ ເຂົ້າໃຈສະພາວະ ແວດລ້ອມ ແລະ ຄວາມຕ້ອງການ ທີ່ຈຳ ເປັນຂອງຄົນອື່ນ ແລະ ສະແດງອອກຄວາມເຂົ້າໃຈ ໃນສິ່ງນັ້ນ **ການຮ່ວມມື ແລະການເຮັດວຽກ ເປັນທີມ** • ການສະແດງອອກເຖິງ • ຄວາມ ເຄົາລົບຕໍ່ການ ປະກອບສ່ວນ ແລະ ການທີ່ມີແບບແຜນທີ່ ແຕກຕ່າງ ຂອງຜູ້ອື່ນ • ການປະເມີນຄວາມ ສາມາດ ຂອງຕົນ ແລະ ການປະກອບ ສ່ວນໃນກຸ່ມ **ທັກສະໃນການໂຄສະນາ ຂົນຂວາຍ**	• ການປະເມີນຜົນທີ່ຈະເກີດ ຂຶ້ນໃນອະນາຄົດຈາກການກ ະທຳໃນປະຈຸບັນສຳລັບ ຕົນເອງ ແລະ ຜູ້ອື່ນ • ການຕັດສິນແກ້ໄຂບັນຫາ ແບບ ມີຫຼາຍທາງເລືອກ • ທັກສະໃນການວິເຄາະ ອິດ ທິພົນຂອງຄ່ານິຍົມ ແລະ ທັດສະນະຄະຕິຂອງຕົນ ແລະ ຜູ້ອື່ນ ກ່ຽວກັບ ສິ່ງກະຕຸ້ນຈູງໃຈ **ທັກສະໃນການຄິ້ນຄິດແບບວິ ພາກວິຈານ** • ການວິເຄາະສື່ຕ່າງໆ • ການວິເຄາະທັດສະນະຄະຕິ, ຄ່ານິຍົມ, ກົດຂອງສັງຄົມ ແລະ ຄວາມເຊື່ອ ແລະ ປັດ ໄຈຕ່າງໆທີ່ ກະທົບຕໍ່ສິ່ງເຫຼົ່ານີ້ • ການກຳນົດ/ລະບຸຂໍ້ມູນທີ່ ກ່ຽວຂ້ອງ ເຊື່ອມໂຍງ ແລະ ແຫຼ່ງທີ່ມາຂອງຂໍ້ມູນ	ພາກພູມໃຈໃນຕົນເອງ ແລະ ຄວາມເຊື່ອໝັ້ນ • ທັກສະສ້າງຄວາມຮັບຮູ້ດ້ວຍຕົນ ເອງປະກອບມີຄວາມຮັບຮູ້ສິດທິ , ອິດທິພົນ, ຄ່ານິຍົມ, ທັດສະນະຄະຕິ, ສິດທິ, ຈຸດແຂງ ແລະ ຈຸດອ່ອນ. • ທັກສະໃນການຕັ້ງເປົ້າໝາຍ • ທັກສະໃນການປະເມີນຕົນເອງ, ການປະເມີນຕົນເອງແບບຕໍ່ ເນື່ອງ ແລະ ການຕິດຕາມຕົນ ເອງ. **ທັກສະເພື່ອບໍລິຫານຄວາມຮູ້ສຶກ** • ການບໍລິຫານຄວາມໂກດແຄ້ນ ເພື່ອແກ້ໄຂກັບຄວາມທຸກໂສກ ແລະ ຄວາມກັງວົນໃຈ • ທັກສະໃນການແກ້ໄຂເພື່ອຮັບມື ກັບ ຄວາມສູນເສຍ, ການທາລຸນ ແລະ ຄວາມເຈັບປວດ **ທັກສະໃນການບໍລິຫານຄວາມກົດ ດັນ** • ການບໍລິຫານເວລາ • ການຄິ້ນຄິດໃນທາງບວກ • ເຕັກນິກການຄາຍຄວາມຄຽດ

• ທັກສະໃນການໃຊ້ອິດທິພົນ • ທັກສະໃນການໂນ້ມ ນ້າວ ຊັກຊວນ • ທັກສະໃນການສ້າງເຄືອ ຂ່າຍ ແລະ ຈູງໃຈ		

ຢູ່ໃນເຄື່ອງມືທີ່ແລ້ວ, ພວກເຮົາໄດ້ສຳຫຼວດຂົງເຂດຕ່າງໆ ເຊິ່ງໂຮງຮຽນຂອງ ທ່ານ ອາດຈຳເປັນ ຕ້ອງມີນະໂຍບາຍທີ່ມີປະສິດທິຜົນກວ່າເດີມ ເຊັ່ນ: ການປ້ອງກັນຄວາມຮຸນແຮງ ແລະ ການເສບສິ່ງ ເສບຕິດ, ປັບປຸງລະບົບນ້ຳ ແລະ ສຸຂາພິບານອື່ນໆ, ລວມທັງ ບັນຫາຕ່າງໆ ດ້ານສຸຂະພາບທີ່ອາດມີ ໃນຊຸມຊົນຂອງທ່ານ. ພາກສ່ວນທີ່ສຳຄັນຂອງການປະຕິບັດ, ຕິດຕາມນະໂຍບາຍເຫຼົ່ານີ້ກໍ ເພື່ອໃຫ້ເດັກ ໄດ້ມີຄວາມຮູ້, ທັດສະນະຄະຕິ ແລະ ທັກສະຕ່າງໆ ເພື່ອນຳໃຊ້ພຶດຕິກຳທີ່ຖືກສຸຂະລັກສະນະຢ່າງຖືກ ຕ້ອງໃນ ພື້ນທີ່ເຫຼົ່ານີ້.

ໂດຍນຳໃຊ້ຂໍ້ມູນຈາກການວິເຄາະນະໂຍບາຍໃນເຄື່ອງມືທີ່ຜ່ານມາ, ໃຫ້ທ່ານຮ່ວມເຮັດວຽກ ກັບ ເພື່ອນຮ່ວມງານ ເພື່ອກຳນົດວ່າມີທັກສະອັນໃດແດ່ຢູ່ໃນຕາຕະລາງ ສຳຄັນທີ່ສຸດສຳລັບນັກຮຽນ ຂອງທ່ານທີ່ຈະຕ້ອງຮຽນຮູ້ອີງໃສ່ນະໂຍບາຍ ແລະ ສະຖານະພາບດ້ານສຸຂະພາບທີ່ປະກົດມີຢູ່ໃນໂຮງ ຮຽນ ແລະ ຊຸມຊົນຂອງທ່ານ. ຈາກນັ້ນ, ໃຫ້ພັດທະນາແນວທາງ ເພື່ອສັງລວມບັນດາທັກສະຕ່າງໆ ເຂົ້າ ໄປໃນວິຊາຕ່າງໆ ທີ່ທ່ານສິດສອນ. ແນວຄວາມຄິດ ຈາກພາກສ່ວນເອັດໄອວີ/ເອດສ໌ ທີ່ນຳສະເໜີໃນ ຕອນທ້າຍເອກະສານເຫຼັ້ມນີ້ຈະຊ່ວຍທ່ານໄດ້. ຢ່າລືມວ່າເດັກ ຄວນຈະເຂົ້າຮ່ວມຢ່າງຕັ້ງໜ້າໃນຂະ ບວນການນີ້.

3. ການນຳໃຊ້ທັກສະໃນການຮຽນຮູ້

ດ້ວຍການສອນທັກສະຕ່າງໆ ທີ່ຈຳເປັນເຫຼົ່ານີ້ໃຫ້ແກ່ເດັກ ເຊັ່ນ: ບັນດາທັກສະທີ່ຂຽນໄວ້ ໃນຕາຕະລາງຂ້າງເທິງນັ້ນ, ເຂົາຈະສາມາດຮັບມືກັບຂໍ້ຫຍຸ້ງຍາກທີ່ທ້າທາຍຫຼາຍຢ່າງ ທີ່ກະທົບຕໍ່ສຸຂະ ພາບຂອງເຂົາ ແລະ ຂອງຄົນອ້ອມຂ້າງໃນການດຳລົງຊີວິດ. ຕໍ່ລົງໄປນີ້ຈະເປັນບາງແນວທາງເຊິ່ງການ ໃຫ້ສຸຂະສຶກສາ ທີ່ອີງທັກສະພື້ນຖານສາມາດຖືກນຳໃຊ້ ໃນໂຮງຮຽນຂອງທ່ານ ເພື່ອປ້ອງກັນບັນຫາ ສຸຂະພາບທີ່ສຳຄັນ. ໃຫ້ສົນທະນາກັບເພື່ອນຮ່ວມງານຂອງ ທ່ານ ກ່ຽວກັບບັນຫາເຫຼົ່ານີ້ວ່າມັນກຳລັງ ກະທົບຕໍ່ນັກຮຽນຂອງ ທ່ານ ຫຼື ບໍ່ ແລະ ຖ້າທັກສະຕ່າງໆ ທີ່ຂຽນໄວ້ຢູ່ໃຕ້ແຕ່ລະບັນຫາຄວນຈະກາຍ ເປັນຈຸດເນັ້ນຂອງແຜນງານ/ ໂຄງການສຸຂະສຶກສາ ທີ່ອີງທັກສະເປັນ ພື້ນຖານ. ຖ້າເປັນເຊັ່ນນັ້ນ, ບັນ ດາກິດຈະກຳຕ່າງໆ ທີ່ໄດ້ກ່າວເຖິງໃນຕອນທ້າຍກ່ຽວກັບເອັດໄອວີ/ເອດສ໌ ກໍສາມາດທີ່ຈະນຳມາ ປັບໃຊ້ເພື່ອແກ້ໄຂປະເດັນບັນຫາເຫຼົ່ານີ້ໄດ້ເຊັ່ນກັນ.

3.1 ການປ້ອງກັນການໃຊ້ສິ່ງເສບຕິດ

ການເສບສິ່ງເສບຕິດ ຫຼື ການໃຊ້ສານເສບຕິດ ໝາຍເຖິງການໃຊ້ທີ່ບໍ່ຈຳເປັນບັນດາ ສານເສບຕິດ ເຊັ່ນ: ຢາເສບຕິດ, ຢາສູບ ແລະ ຂອງມຶນເມົາ (ເຫຼົ້າ, ເບຍ...). ເພື່ອທີ່ຈະ

ລະບຸໄດ້ວ່າແມ່ນນັກຮຽນຄົນໃດ ທີ່ໄດ້ຮັບຜົນກະທົບຈາກສານເສບຕິດນັ້ນ, ທ່ານຈຳເປັນຕ້ອງສັງເກດພຶດຕິກຳຂອງເຂົາຢ່າງໃກ້ຊິດ ແລະ ພັດທະນາການພົວພັນທີ່ດີກັບຄອບຄົວເຂົາດ້ວຍ. ຈາກນັ້ນ, ເຂົາຈະມີຄວາມຮູ້ສຶກໝັ້ນໃຈ ໃນການແລກປ່ຽນບັນຫາທີ່ກ່ຽວຂ້ອງກັບເດັກຂອງເຂົາ. ເພື່ອຈະປ້ອງກັນການໃຊ້ສິ່ງເສບຕິດໄດ້ນັ້ນມີໜຶ່ງ ຫຼື ຫຼາຍໆທັກສະຊີວິດ ທີ່ເຮົາສາມາດ ທີ່ຈະເຮັດໃຫ້ນັກຮຽນໄດ້ ເຊັ່ນ:

- ຕ້ານທານຄວາມກົດດັນຂອງເພື່ອນທີ່ຈະໃຫ້ເສບສິ່ງເສບຕິດ (ທັກສະການເຮັດການຕັດສິນ ໃຈ, ທັກສະການສື່ສານ, ທັກສະໃນການຄວບຄຸມອາລົມຈິດ);
- ຕ້ານທານຄວາມກົດດັນທີ່ຈະໃຫ້ເສບສິ່ງເສບຕິດໂດຍບໍ່ຕ້ອງເສຍໜ້າ ຫຼື ເສຍເພື່ອນ (ທັກສະການເຮັດການຕັດສິນໃຈ, ທັກສະການສື່ສານ, ທັກສະການພົວພັນລະຫວ່າງບຸກຄົນ)
- ກຳນົດ/ລະບຸປັດໄຈທາງສັງຄົມທີ່ອາດເປັນສາເຫດໃຫ້ເຂົາໃຊ້ສານເສບຕິດ ແລະ ຕັດສິນໃຈວ່າຈະເຮັດວິທີໃດໂດຍສ່ວນຕົວ ເພື່ອຮັບມືແກ້ໄຂສາເຫດເຫຼົ່ານັ້ນ (ທັກສະການຄົ້ນຄິດແບບວິພາກວິຈານ, ທັກສະການແກ້ໄຂບັນຫາ, ທັກສະການເຮັດການຕັດສິນໃຈ);
- ບອກໃຫ້ຜູ້ອື່ນໆຮູ້ເຖິງຄວາມເປັນອັນຕະລາຍ ແລະ ເຫດຜົນສ່ວນຕົວໃນການບໍ່ໃຊ້ສານເສບຕິດ (ທັກສະໃນການສື່ສານ, ທັກສະໃນການຮັບຮູ້ດ້ວຍຕົນເອງ, ທັກສະການພົວພັນ ລະຫວ່າງບຸກຄົນ);
- ມີການຮ້ອງຂໍທີ່ມີປະສິດທິຜົນ ເພື່ອໃຫ້ມີສະພາບແວດລ້ອມທີ່ປາສະຈາກການສູບຢາ, ຢາເສບຕິດ, ສິ່ງມຶນເມົາ ແລະ ອື່ນໆ
- ກຳນົດ ແລະ ຕ້ານຂ່າວສານທີ່ຈູງໃຈຊັກຊວນໃນການໂຄສະນາຕ່າງໆ ແລະ ວັດຖຸສິ່ງຂອງທີ່ຈູງໃຈ(ທັກສະການຄົ້ນຄິດແບບວິພາກວິຈານ, ທັກສະໃນການສື່ສານ, ທັກສະໃນການຮັບຮູ້ດ້ວຍຕົນເອງ)
- ສະໜັບສະໜູນຄົນທີ່ພະຍາຍາມຍຸດຕິການໃຊ້ສານເສບຕິດ(ທັກສະການຄົ້ນຄິດແບບວິພາກວິຈານ, ທັກສະໃນການຄວບຄຸມອາລົມຈິດ, ທັກສະໃນການຮັບມືກັບຄວາມກົດດັນ, ທັກສະໃນການແກ້ໄຂບັນຫາ).

3.2 ການປ້ອງກັນຄວາມຮຸນແຮງ

ເພື່ອປ້ອງກັນຄວາມຮຸນແຮງ, ນັກຮຽນຕ້ອງມີໜຶ່ງ ຫຼື ຫຼາຍທັກສະຈຶ່ງຈະເຮັດສິ່ງຕ່າງໆດັ່ງຕໍ່ໄປນີ້ໄດ້:

- ກຳນົດ/ລະບຸ ການດຳເນີນການແກ້ໄຂບັນຫາແບບສັນຕິເພື່ອແກ້ຂໍ້ຂັດແຍ່ງ (ທັກສະໃນການແກ້ໄຂບັນຫາ, ທັກສະໃນການເຮັດການຕັດສິນໃຈ, ທັກສະການຄົ້ນຄິດແບບວິພາກວິຈານ, ທັກສະໃນການຮັບມືກັບຄວາມກົດດັນ, ທັກສະໃນການຄວບຄຸມອາລົມຈິດ, ທັກສະໃນ ການສື່ສານ, ທັກສະໃນການພົວພັນລະຫວ່າງບຸກຄົນ);

- ກຳນົດ/ລະບຸ ແລະ ຫຼີກລ້ຽງສະຖານະການອັນຕະລາຍ (ທັກສະການຄິ້ນຄິດແບບວິພາກວິຈານ, ທັກສະໃນການແກ້ໄຂບັນຫາ, ທັກສະໃນການເຮັດການຕັດສິນໃຈ);
- ປະເມີນແນວທາງ ເພື່ອຫຼີກລ້ຽງຄວາມຮຸນແຮງ ທີ່ປະກົດໃຫ້ເຫັນໃນສື່ຕ່າງໆ ວ່າມັນໄດ້ຮັບ ຜົນ ສຳເລັດ (ທັກສະການຄິ້ນຄິດແບບວິພາກວິຈານ);
- ຕ້ານການກົດດັນຈາກເພື່ອນ ແລະ ຜູ້ໃຫຍ່ເພື່ອໃຫ້ໃຊ້ພຶດຕິກຳຮຸນແຮງ (ທັກສະໃນການແກ້ໄຂບັນຫາ, ທັກສະໃນການເຮັດການຕັດສິນໃຈ, ທັກສະການຄິ້ນຄິດແບບວິພາກວິຈານ, ທັກສະໃນການຮັບມືກັບຄວາມກົດດັນ, ທັກສະໃນການຄວບຄຸມອາລົມຈິດ, ທັກສະໃນການສື່ສານ, ທັກສະໃນການພົວພັນລະຫວ່າງບຸກຄົນ);
- ກາຍເປັນຜູ້ໄກ່ເກ່ຍ ແລະ ເຮັດໃຫ້ຜູ້ທີ່ກ່ຽວຂ້ອງກັບຄວາມຮຸນແຮງສະຫງົບລົງ (ທັກສະໃນການຮັບຮູ້ດ້ວຍຕົນເອງ, ທັກສະໃນການແກ້ໄຂບັນຫາ, ທັກສະໃນການເຮັດການຕັດສິນໃຈ, ທັກສະການຄິ້ນຄິດແບບວິພາກວິຈານ, ທັກສະໃນການຮັບມືກັບຄວາມກົດດັນ, ທັກສະໃນການຄວບຄຸມອາລົມຈິດ, ທັກສະໃນການສື່ສານ, ທັກສະໃນການພົວພັນລະຫວ່າງບຸກຄົນ);
- ຊ່ອຍປ້ອງກັນການກະທຳຜິດທີ່ຮ້າຍແຮງໃນຊຸມຊົນ (ທັກສະໃນການແກ້ໄຂບັນຫາ, ທັກສະໃນການເຮັດການຕັດສິນໃຈ, ທັກສະໃນການສື່ສານ, ທັກສະໃນການຄວບຄຸມອາລົມຈິດ);
- ຫຼຸດຜ່ອນຄວາມລຳອຽງ ແລະ ເພີ້ມທະວີຄວາມໃຈກວ້າງ ສຳລັບຄວາມແຕກຕ່າງຫຼາກຫຼາຍ (ທັກສະການຄິ້ນຄິດແບບວິພາກວິຈານ, ທັກສະໃນການຮັບມືກັບຄວາມກົດດັນ, ທັກສະໃນ ການຄວບຄຸມອາລົມຈິດ, ທັກສະໃນການສື່ສານ, ທັກສະໃນການພົວພັນລະຫວ່າງບຸກຄົນ);

3.3 ການໂພຊະນາການທີ່ຖືກສຸຂະລັກສະນະ

ສຳລັບການໂພຊະນາການທີ່ຖືກສຸຂະລັກສະນະ, ນັກຮຽນຕ້ອງມີໜຶ່ງ ຫຼື ຫຼາຍທັກສະຈຶ່ງຈະເຮັດສິ່ງຕ່າງໆດັ່ງຕໍ່ໄປນີ້ໄດ້:

- ກຳນົດ/ລະບຸຄວາມມັກເປັນສ່ວນບຸກຄົນໃນໝູ່ອາຫານ ແລະ ອາຫານວ່າງ ທີ່ມີໂພຊະນາການດີ, ຈາກນັ້ນ, ໃຫ້ຄັດເລືອກເບິ່ງອາຫານ ແລະ ອາຫານວ່າງທີ່ມີຄຸນຄ່າທາງໂພຊະນາການໜ້ອຍ.(ທັກສະໃນການຮັບຮູ້ດ້ວຍຕົນເອງ, ທັກສະໃນການເຮັດການຕັດສິນໃຈ);
- ກຳນົດການຕ່ຕ້ານຄວາມກົດດັນຂອງສັງຄົມ ທີ່ມີພຶດຕິກຳການກິນ ທີ່ບໍ່ຖືກສຸຂະລັກສະນະ (ທັກສະການຄິ້ນຄິດແບບວິພາກວິຈານ, ທັກສະໃນການສື່ສານ);
- ຊັກຊວນພໍ່ແມ່ ຜູ້ປົກຄອງໃຫ້ເຮັດອາຫານ ແລະ ເລືອກລາຍການອາຫານ ທີ່ຖືກສຸຂະລັກສະນະ (ທັກສະການຄິ້ນຄິດແບບວິພາກວິຈານ, ທັກສະການສື່ສານ)

- ປະເມີນຄຳກ່າວອ້າງທາງໂພຊະນາການຈາກການໂຄສະນາ ແລະ ບົດເລື່ອງຂ່າວ ຄາວທີ່ ກ່ຽວຂ້ອງ ກັບໂພຊະນາການ (ທັກສະການຄົ້ນຄິດແບບວິພາກວິຈານ).

3.4 ການປັບປຸງການອະນາໄມ ແລະ ສຸຂະອະນາໄມ.

ການປັບປຸງການອະນາໄມ, ການສະໜອງນ້ຳທີ່ປອດໄພ ລວມທັງການອະນາໄມສ່ວນບຸກຄົນ ແລະ ອາຫານສາມາດຫຼຸດຜ່ອນຄວາມເຈັບເປັນ ແລະ ພະຍາດຕ່າງໆໄດ້ຢ່າງໃຫຍ່ຫຼວງ. ອົງ ປະກອບໜຶ່ງທີ່ສຳຄັນຂອງແຜນງານ/ໂຄງການປັບປຸງສຸຂະອະນາໄມກໍຄືສຸຂະອະນາໄມສຶກສາ(hygieneducation). ແທນທີ່ຈະສະໜອງໃຫ້ພຽງຂໍ້ມູນຄວາມຮູ້ນັ້ນ, ດ້ວຍນຳໃຊ້ສຸຂະສຶກສາ ທີ່ອີງໃສ່ທັກສະພື້ນຖານ, ຈະສາມາດທີ່ຈະຊ່ວຍນັກຮຽນ:

- ກຳນົດ/ລະບຸແລະຫຼີກລ້ຽງພຶດຕິກຳ ແລະ ເງື່ອນໄຂສະພາບແວດລ້ອມທີ່ໜ້າຈະເປັນ ສາເຫດໃຫ້ເກີດພະຍາດທີ່ພົວພັນກັບນ້ຳ-ສຸຂະອະນາໄມ(ທັກສະການແກ້ໄຂບັນຫາ, ທັກສະໃນການເຮັດການຕັດສິນໃຈ);
- ສື່ສານຂ່າວຄາວກ່ຽວກັບພະຍາດຕ່າງໆ ແລະ ການຕິດຕໍ່ພະຍາດສູ່ຄອບຄົວ, ໝູ່ ເພື່ອນ ແລະ ສະມາຊິກຊຸມຊົນ (ທັກສະໃນການສື່ສານ, ທັກສະໃນການພົວພັນລະ ຫວ່າງບຸກຄົນ);
- ຊຸກຍູ້ຜູ້ອື່ນໆ (ເຊັ່ນ: ໝູ່ເພື່ອນ, ອ້າຍເອື້ອຍນ້ອງ ແລະ ສະມາຊິກຄອບຄົວ) ຫັນປ່ຽນ ນິໄສ ຄວາມຊິນເຄີຍ ທີ່ບໍ່ຖືກສຸຂະລັກສະນະ (ທັກສະໃນການຄົ້ນຄິດແບບວິພາກວິ ຈານ, ທັກສະ ໃນການສື່ສານ, ທັກສະໃນການພົວພັນລະຫວ່າງບຸກຄົນ).

3.5 ການສົ່ງເສີມສຸຂະພາບຈິດ

ສຳລັບການສົ່ງເສີມສຸຂະພາບຈິດ, ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານ ສາມາດເປັນພາກສ່ວນ ໜຶ່ງຂອງຄວາມພະຍາຍາມທີ່ກວ້າງຂວາງ ເພື່ອສ້າງສະພາບແວດລ້ອມດ້ານຈິດຕະ-ສັງຄົມ ທີ່ຖືກ ສຸຂະລັກສະນະໃນໂຮງຮຽນ. ສະພາບແວດລ້ອມຂອງໂຮງຮຽນ ທີ່ຖືກສຸຂະລັກສະນະ ຈະປັບປຸງ ຄວາມອຸດົມຮັ່ງມີທາງ ດ້ານຈິດຕະ-ສັງຄົມ,ອາລົມຈິດ ແລະ ຜົນຂອງການຮຽນຮູ້ ເຊັ່ນ:

- ສົ່ງເສີມການຮ່ວມມື ແທນທີ່ຈະເປັນການແຂ່ງຂັນ;
- ໃຫ້ຄວາມສະດວກການສື່ສານທີ່ມີລັກສະນະສະໜັບສະໜູນ, ເປີດເຜີຍ;
- ເຫັນການສະໜອງໂອກາດແບບປະດິດສ້າງເປັນສິ່ງສຳຄັນ.
- ປ້ອງກັນການລົງໂທດທາງຮ່າງກາຍ, ການຂົ່ມເຫັງ, ການລວນລາມ ແລະ ຄວາມ ຮຸນແຮງ.

4. ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານເພື່ອປ້ອງກັນເອັດໄອວີ/ເອດສ໌

ໃນພາກນີ້ ຈະພັນລະນາເຖິງວິທີການໃຫ້ສຸຂະສຶກສາ ທີ່ອີງໃສ່ທັກສະພື້ນຖານ ຈະສາມາດ ນຳໃຊ້ ເພື່ອປ້ອງກັນເອັດໄອວີ/ເອດສ໌ ແລະ ຫຼຸດຜ່ອນການປະນາມ ຜູ້ທີ່ມີຜົນກະທົບຈາກ

ພະຍາດ. ຍິ່ງໄປກວ່ານີ້, ກິດຈະກຳຕ່າງໆ ໃນພາກນີ້ສາມາດນຳໄປປັບໃຊ້ ໃນການແກ້ໄຂບັນຫາ ສຸຂະພາບອື່ນໆ ດັ່ງທີ່ກ່າວມາ ຂ້າງເທິງ. ການສຶກສາ ແມ່ນຂໍກຸນແຈເພື່ອຫຼຸດຜ່ອນການປະນາມ ແລະ ສົ່ງເສີມໃຫ້ເຂົ້າໃຈເຖິງຜົນກະທົບຂອງ ເອັດໄອວີ/ ເອດສ໌ ດີຂຶ້ນ. ໂຮງຮຽນຂອງທ່ານ ເປັນອົງການການຈັດຕັ້ງທີ່ສຳຄັນສຳລັບການສຶກສາ ກ່ຽວກັບ ເອັດໄອວີ/ ເອດສ໌ ລວມທັງ ການຢຸດ ຢັ້ງການແຜ່ກະຈາຍການຕິດເຊື້ອເອັດໄອວີ. ຄວາມສຳເລັດ ໃນການປະຕິບັດ ສິ່ງນີ້ ຂຶ້ນກັບວ່າ ເຮົາສາມາດເຂົ້າເຖິງເດັກ ແລະ ໄວໜຸ່ມສາວຕົງເວລາສ່ຳໃດ ເພື່ອສົ່ງເສີມພຶດຕິກຳສຸຂະພາບ ທີ່ຖືກຕ້ອງ ແລະ ປ້ອງກັນພຶດຕິກຳທີ່ນຳຄົນໄວໜຸ່ມໄປສູ່ຄວາມສ່ຽງ.

ຄວາມຮັບຜິດຊອບທີ່ສຳຄັນຂອງພວກເຮົາ ກໍຄື ສອນຊາວໜຸ່ມກ່ຽວກັບວິທີຫຼີກລ້ຽງການ ຈະໄປສຳຜັດການຕິດເຊື້ອ ຫຼື ແຜ່ເຊື້ອສູ່ຄົນອື່ນ ລວມທັງ ສົ່ງເສີມການພັດທະນານະໂຍບາຍໂຮງ ຮຽນ ທີ່ກ່ຽວ ຂ້ອງກັບເຊື້ອເອັດໄອວີ. ດ້ວຍແນວທາງນີ້ ພວກເຮົາຈະສາມາດເຮັດການປັບປຸງ ທີ່ສຳຄັນ ໃນດ້ານຄຸນນະພາບຂອງສຸຂະສຶກສາທີ່ຈັດໃຫ້ຊາວໜຸ່ມ ໃນໂຮງຮຽນຂອງພວກເຮົາ ແລະ ຈະສາມາດດຳເນີນຂັ້ນ ຕອນທີ່ສຳຄັນ ເພື່ອການປັບປຸງສຸຂະພາບຂອງຊຸມຊົນຂອງເຮົາ.

ວິທີການແບບອີງໃສ່ທັກສະພື້ນຖານ ເພື່ອຕ້ານເອັດໄອວີ/ເອັດສ໌ ຈະນຳໃຊ້ເຕັກນິກການ ຮຽນຮູ້ ແບບມີສ່ວນຮ່ວມ(ແບບຕັ້ງໜ້າ) ເພື່ອ:

- ຊ່ວຍເຫຼືອສ່ວນບຸກຄົນເພື່ອປະເມີນລະດັບຄວາມສ່ຽງຂອງຕົນ;
- ກວດສອບຄ່ານິຍົມ ແລະ ຄວາມເຊື່ອຂອງເຂົາ;
- ຕັດສິນໃຈວ່າຈະໃຊ້ປະຕິບັດການອັນໃດແດ່ ເພື່ອປ້ອງກັນຕົນເອງ ແລະ ຜູ້ອື່ນຈາກ ເຊື້ອເອັດໄອວີ.
- ໄດ້ຮັບທັກສະຕ່າງໆທີ່ຈະຊ່ວຍພວກເຂົາສືບຕໍ່ປະຕິບັດສິ່ງທີ່ເຂົາໄດ້ຕັດສິນໃຈ.

ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານ ເພື່ອປ້ອງກັນເອັດໄອວີ/ເອດສ໌ ສາມາດທີ່ຈະເຊື່ອມ ສຳພັນກັບປະເດັນບັນຫາທີ່ກ່ຽວຂ້ອງອື່ນໆ ທີ່ໄດ້ກ່າວມາໃນຫຼາຍໆ ໂຮງຮຽນຂອງພວກເຮົາລວມ ທັງການຖືພາ ແລະ ສຸຂະພາບຈະເລີນພັນ, ປະຊາກອນສຶກສາ, ການສຶກສາກ່ຽວກັບຄອບຄົວ ແລະ ການປ້ອງກັນ ການໃຊ້ສານເສບຕິດ. ມີແນວທາງໃດແດ່ທີ່ທ່ານ ຈະສາມາດເລີ້ມຕົ້ນໂຄງ ການພັດທະນາທັກສະພື້ນຖານ ເພື່ອປ້ອງກັນເອັດໄອວີ/ເອດສ໌ໃນໝູ່ເດັກ?. ພວກເຮົາມາເບິ່ງບາງ ແນວທາງເຫຼົ່ານີ້ໃນແງ່ຂອງກິດຈະກຳຕ່າງໆ ທີ່ທ່ານ ແລະ ໂຮງຮຽນສາມາດເຮັດ ລວມທັງ ສິ່ງທີ່ທ່ານສາມາດເຮັດໄດ້ກັບເດັກ.

ກິດຈະກຳປະຕິບັດ: ຄູ ແລະ ໂຮງຮຽນສາມາດເຮັດຫຍັງໄດ້ແດ່? [9]

1. ຮັບຂໍ້ມູນຂ່າວສານ ແລະ ມີຄວາມຕັ້ງໜ້າສະເໝີ

- ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບເອັດໄອວີ/ເອດສ໌ທີ່ເປັນປະຈຸບັນ, ຮູບແບບຕ່າງໆ ຂອງ ການຕິດເຊື້ອ ແລະ ການປ້ອງກັນ ແລະ ຜົນທີ່ຕາມມາຂອງມັນ.

[9] ປັບມາຈາກ: Schenker II, Nyirenda JM. (2002) Preventing HIV/AIDS in Schools. International Academy of Education and the International Bureau of Education. Educational Pracices Series 9. Paris.

- ♦ ເຂົ້າໃຈທັດສະນະຄະຕິ, ຄ່ານິຍົມ ແລະ ຄວາມເຊື່ອຂອງທ່ານເອງກ່ຽວກັບ ເອັດໄອວີ/ເອດສ ແລະ ພັດທະນາຄວາມໝັ້ນໃຈ ໃນການສື່ສານຂໍ້ມູນຂ່າວສານ ທີ່ທ່ານປາຖະໜາຈະສົ່ງໃຫ້ ນັກຮຽນຂອງທ່ານ.

2. ສ້າງຕັ້ງການຮ່ວມງານກັນ

- ♦ ພັດທະນາການຮ່ວມງານ ຢ່າງນ້ອຍກັບເພື່ອນຜູ້ໃດຜູ້ໜຶ່ງໃນໂຮງຮຽນຂອງທ່ານ. ການເຮັດວຽກເປັນທີມແມ່ນສິ່ງທີ່ສຳຄັນທີ່ສຸດ
- ♦ ຄົ້ນຫາອົງການຈັດຕັ້ງ ແລະ ອົງກອນບໍລິການຕ່າງໆ ທີ່ກ່ຽວຂ້ອງກັບການປ້ອງກັນ ແລະ ດູແລ ເລື່ອງ ເອັດໄອວີ/ເອດສ໌ ໃນຊຸມຊົນຂອງທ່ານ. ຂໍເຂົ້າພົບຕົວແທນຂອງອົງກອນດັ່ງກ່າວ ແລະ ຮຽນຮູ້ວ່າເຂົາສາມາດທີ່ຈະຊ່ວຍເຫຼືອ ທ່ານຢ່າງໃດໃນເລື່ອງ ຂໍ້ມູນຄວາມຮູ້, ອຸປະກອນ ການສອນ ແລະ ຊັບພະຍາກອນອື່ນໆ.

3. ນຳໃຊ້ການສື່ສານແບບເປີດເຜີຍ

- ♦ ກຽມຕົວທ່ານເອງ ເພື່ອຈະສົນທະນາອະພິປາຍຢ່າງເປີດເຜີຍຈັກຫ້າ ເຖິງ ສິບປະເດັນ ບັນຫາ ໃນຫ້ອງຮຽນເຊິ່ງທ່ານພິຈາລະນາແລ້ວ ເຫັນວ່າເປັນເລື່ອງລະອຽດອ່ອນທີ່ສຸດ. ກຳນົດ ແລະ ອະທິບາຍ ປະເດັນບັນຫາ, ສຳຫຼວດຈຸດເດັ່ນ ແລະ ຈຸດດ້ອຍ ແລະ ສົນທະນາບັນຫາກັບ ເພື່ອນຮ່ວມງານ ຂອງທ່ານ.

4. ໃຊ້ວິທີການສິດສອນແບບມີສ່ວນຮ່ວມ

- ♦ ໄດ້ຮັບປະສົບການ ແລະ ຄວາມຮູ້ໃນການໃຊ້ວິທີການຮຽນຮູ້ແບບຕັ້ງໜ້າ ແລະ ແບບມີສ່ວນຮ່ວມ. ໃຫ້ເຝິກປະຕິບັດວິທີການເຫຼົ່ານີ້ກັບບາງກຸ່ມນັກຮຽນ ກ່ອນທີ່ທ່ານ ຈະໃຊ້ໝົດໃນຫ້ອງ.
- ♦ ຫຼີກລ້ຽງວິທີການແບບບັນຍາຍກັບນັກຮຽນຂອງທ່ານ; ໃຫ້ເຂົາສະແດງບົດບາດໃນ ຫ້ອງຮຽນ. ຊ່ວຍນັກຮຽນຂອງທ່ານ ໃຫ້ກາຍເປັນຜູ້ຮ່ວມງານ ໃນການຊອກຫາຂໍ້ມູນ ຂ່າວສານ, ວິເຄາະຂໍ້ມູນ, ສົນທະນາກ່ຽວກັບການຕິດແປດ ແລະ ກຳນົດແນວທາງ ເພື່ອປ້ອງກັນການຕິດເຊື້ອ.
- ♦ ກະຕຸກຊຸກຍູ້ການຖາມ, ສົນທະນາ ແລະ ສິ່ງເສີມແນວຄວາມຄິດໃໝ່ໆ.

5. ນຳໃຊ້ການສອນທີ່ເປັນນະວັດຕະກຳໃໝ່

- ♦ ໃຊ້ຫຼັກສູດທີ່ໃຊ້ສື່ຫຼາກຫຼາຍ ໃນການສິດສອນ. ເຮັດໃຫ້ຫ້ອງຮຽນທີ່ສອນເອັດໄອວີ/ເອດສ ມີ ລັກສະນະພິເສດ, ສອດຄ່ອງ ແລະ ໜ້າສົນໃຈ ສຳລັບ ນັກຮຽນຂອງທ່ານ.
- ♦ ວາງແຜນພາກການສອນແບບຫຼາຍຮູບແບບ, ຢ່າງນ້ອຍ ໃຫ້ມີສີ່ຫ້ອງຮຽນກະຈາຍ ອອກໄປຕະຫຼອດເວລາ.

- ♦ ໂດຍຜ່ານການສິດສອນແບບມີສ່ວນຮ່ວມ, ຂໍ້ມູນຄວາມຮູ້ກ່ຽວກັບການປ້ອງກັນ ເອັດ ໄອວີ/ເອດສ໌ ຈະສາມາດນຳໄປເຜີຍແຜ່ຕໍ່ໃຫ້ແກ່ຄອບຄົວໂດຍນັກຮຽນ. ຄວນສ້າງບັດ ຄຳ ແລະ ໜັງ ສືຂໍ້ມູນຄວາມຮູ້ "ນຳເມືອເຮືອນ" ແລະ ແນະນຳໃຫ້ພໍ່ແມ່ຜູ້ປົກຄອງ ໄດ້ໂອ້ລົມກັບເດັກ ກ່ຽວ ກັບເອັດໄອວີ/ເອດສ໌.
- ♦ ດຶງດູດເອົາພໍ່ແມ່ ຜູ້ປົກຄອງເຂົ້າມີສ່ວນຮ່ວມ ແລະ ຖ້າພໍເປັນໄປໄດ້ ໃຫ້ລວມເອົາ ຂະແໜງ ການຕ່າງໆ ໃນຊຸມຊົນດ້ວຍ. ຈັດຕັ້ງກິດຈະກຳການສອນການຮຽນຕ່າງຫາກ ສຳລັບ ພໍ່ແມ່ຜູ້ ປົກຄອງ ຊຶ່ງມັນອາດສາມາດປັ່ງປຸງການສື່ສານຂອງເຂົາ ກັບລູກຫຼານ ຂອງເຂົາເຈົ້າ ກ່ຽວກັບ ບັນຫາ ການປ້ອງກັນເຊື້ອເອັດໄອວີ.

6. ໃຊ້ວິທີການແບບຕອບສະໜອງບົດບາດຍິງ-ຊາຍ

- ♦ ກ່າວເຖິງຄວາມຕ້ອງການທີ່ຈຳເປັນຂອງເດັກຍິງ ແລະ ເດັກຊາຍ ແລະ ສິ່ງເສີມການຮຽນ ຮູ້ກ່ຽວກັບເອັດໄອວີ/ເອດສ໌ ໃນທັງ 2 ກຸ່ມເພດດ່ຽວ ແລະ ກຸ່ມເພດປະສົມ.
- ♦ ກ່ຽວໂຍງການສິດສອນຂອງທ່ານ ໃສ່ຄວາມດຸ່ນດ່ຽງທາງອຳນາດ ລະຫວ່າງເດັກຊາຍ ແລະ ເດັກຍິງ ແລະ ສ້າງຄວາມເຂັ້ມແຂງດ້ານທັກສະ ໃນການເຈລະຈາຕໍ່ລອງຂອງ ເດັກຍິງ.
- ♦ ນຳສະເໜີເລື່ອງລາວ ກ່ຽວກັບສະຖານະການ ທີ່ຊັດເຈນດ້ວຍຄວາມລະມັດລະວັງ ເພື່ອເສີມຂະຫຍາຍທັກສະຂອງເດັກຍິງ ແລະ ກ້າທີ່ຈະເວົ້າຄຳວ່າ "ບໍ່"

7. ແກ້ບັນຫາເນື້ອໃນທີ່ລະອຽດອ່ອນດ້ານວັດທະນະທຳ

- ♦ ໂຄງການປ້ອງກັນທີ່ພັດທະນາຂຶ້ນ ໃນທ້ອງຖິ່ນຈະມີປະສິດທິຜົນທີ່ສຸດ ຖ້າຫາກມີ ການນຳເອົາປະເພນີທ້ອງຖິ່ນ, ວິທີສິດສອນ ແລະ ມາດຖານການສອດແຊກ.
- ♦ ກຳນົດ/ລະບຸຄວາມຮູ້, ທັດສະນະຄະຕິ, ຄວາມເຊື່ອ, ທັກສະ ແລະ ການບໍລິການ ຕ່າງໆ ທີ່ມີ ອິດທິພົນແບບທາງບວກ ຫຼື ທາງລົບຕໍ່ພຶດຕິກຳ ແລະ ສະພາບເງື່ອນໄຂ ທີ່ກ່ຽວຂ້ອງທີ່ສຸດ ຕໍ່ກັບ ການຕິດຊື້ອເອັດໄອວີ/ເອດສ໌ ໃນຊຸມຊົນຂອງທ່ານ
- ♦ ໃຫ້ຕົວຢ່າງທີ່ເປັນຮູບປະທຳຈາກວັດທະນະທຳຂອງເຂົາ ເມື່ອສົນທະນາວິທີປ້ອງກັນ ເຊື້ອເອັດໄອ ວີກັບນັກຮຽນ.

8. ຄຸນຄ່າຂອງການສະໜັບສະໜູນພື້ນຖານຂອງເພື່ອນດ້ວຍກັນ

- ♦ ພັດທະນາພື້ນທີ່ທີ່ປອດໄພເພື່ອການສົນທະນາໃນຫ້ອງຮຽນ. ຊຸກຍູ້ນັກຮຽນ ໃຫ້ສະ ໜັບສະໜູນເຊິ່ງກັນ ແລະ ກັນ ໃນການຮຽນຮູ້ ກ່ຽວກັບການປ້ອງກັນເຊື້ອເອັດໄອວີ ແລະ ໃນການໂອ້ລົມ ກ່ຽວກັບການສ່ຽງໄພ.

- ຮັບຮູ້ກົດຂອງກຸ່ມທີ່ປະກົດມີຢູ່. ຊີ້ນຳທິດທາງ ເພື່ອທີ່ຈະໃຫ້ເຂົ້າສະໜັບສະໜູນຍຸດ ທະສາດ ທີ່ມີປະສິດທິຜົນ ສຳລັບ ການມີເພດສຳພັນທີ່ປອດໄພ ແລະ ການປ້ອງກັນ ໂລກເອດສ໌ ແລະ ການໃຊ້ຢາເສບຕິດ.
- ນຳໃຊ້ຄວາມເປັນຜູ້ນຳຂອງທ່ານ ເພື່ອດຶງເອົາເພື່ອນຂອງເດັກ ຫຼື ຜູ້ທີ່ຕິດເຊື້ອເອັດ ໄອວີ ມາເປັນຜູ້ໃຫ້ການຂໍ້ມູນເພີ່ມເຕີມ ໃນຊົ່ວໂມງສິດສອນຂອງທ່ານ.

9. ນຳໃຊ້ສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານຢ່າງຕັ້ງໜ້າ

ສົ່ງເສີມສຸຂະສຶກສາທີ່ອີງໃສ່ທັກສະພື້ນຖານເພື່ອແນໃສ່:

- ທັກສະຊີວິດ (ການເຈລະຈາ, ການຢືນຢັນ, ການປະຕິເສດ, ການສື່ສານ);
- ທັກສະການຮັບຮູ້ (ການແກ້ໄຂບັນຫາ, ການຄິ້ນຄິດແບບວິພາກວິຈານ, ການເຮັດ ການຕັດ ສິນໃຈ);
- ທັກສະການແກ້ບັນຫາ (ການບໍລິຫານຄວາມກົດດັນ, ການເພີ້ມທະວີເຂດຄວບຄຸມ ພາຍໃນ)
- ທັກສະໃນການປະຕິບັດ (ການໃຊ້ຖົງຢາງອະນາໄມ).

ກິດຈະກຳປະຕິບັດ: ເຮົາຈະສາມາດເຮັດຫຍັງໄດ້ແດ່ກັບເດັກຂອງພວກເຮົາ? [10]

ເດັກໃນໂຮງຮຽນເປັນອະນາຄົດຂອງຊຸມຊົນ ແລະ ຕ້ອງຮຽນຮູ້ເພື່ອຮັບຜິດຊອບຄົນອື່ນ ລວມທັງຕົວເຂົາເອງ. ດ້ວຍການນຳພາຂອງຄູ, ພະນັກງານແພດ ແລະ ຜູ້ນຳຊຸມຊົນ, ເດັກ ສາມາດທີ່ຈະຮຽນຮູ້ວິທີປ້ອງກັນຄອບຄົວຂອງເຂົາ, ຄູ່ຮ່ວມງານ ແລະ ຕົວເຂົາເອງຈາກເຊື້ອໂລກ ເອດສ໌. ເດັກ ແລະ ຄົນໜຸ່ມ ສາວ ສາມາດທີ່ຈະຕັດສິນໃຈ ກ່ຽວກັບ ພຶດຕິກຳຂອງຕົນ ແລະ ມອບແບບແຜນພຶດຕິກຳທາງເພດທີ່ ປອດໄພ ໃຫ້ຊຸມຊົນ.

ສິ່ງທີ່ເດັກແຕ່ລະຄົນຄວນຮູ້

ໂຮງຮຽນຄວນມີນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ ເຊິ່ງເດັກແຕ່ລະຄົນ ເມື່ອອອກຈາກ ໂຮງຮຽນໄປຕ້ອງຮູ້ຂໍ້ເທັດຈິງທີ່ສຳຄັນເຫຼົ່ານີ້. ພະນັກງານແພດ ແລະ ຜູ້ນຳກຸ່ມຊາວໜຸ່ມສາມາດ ທີ່ຈະປະຕິບັດ ພັນທະ ທີ່ຄ້າຍຄືກັນເພື່ອຖ່າຍທອດຕໍ່ຄວາມຮູ້ທີ່ສຳຄັນຕໍ່ຊີວິດນີ້.

ໂລກເອດສ໌ແມ່ນຫຍັງ? ເອດສ໌ ແມ່ນພະຍາດທີ່ເກີດມາຈາກເຊື້ອຈຸລິນຊີ, ຈຸລາໂລກເອັດໄອວີ. ເອດສ໌ ເຮັດໃຫ້ຄົນເຮົາບໍ່ສາມາດປ້ອງກັນຕົນເອງຈາກໂລກພະຍາດຫຼາຍຢ່າງ ເຊັ່ນ ຖອກທ້ອງ, ວັນນະໂລກ ແລະ ປອດບວມ. ເນື່ອງຈາກ ເອດສ໌, ພະຍາດເຫຼົ່ານີ້ສາມາດ ທີ່ຈະເຮັດໃຫ້ຄົນ

[10] ແຫຼ່ງຂໍ້ມູນ: Baily D, Hawes Hand Bonati B. (1994) Child-to-Child: A Resource Book. Part 2: The Child-to-Child Activity Sheets. London: The Child-to-Child Trust.
ນີ້ເປັນແຫຼ່ງຂໍ້ມູນທີ່ດີເລີດ ສຳລັບການເພີ້ມທະວີການມີສ່ວນຮ່ວມຂອງເດັກໃນເລື່ອງເອັດໄອວີ/ເອດສ໌ ລວມທັງ ປະເດັນ ບັນຫາກ່ຽວກັບສຸຂະພາບ ແລະ ການພັດທະນາການຂອງເດັກທີ່ສຳຄັນ. ສະໜັບສະໜູນ ໃຫ້ຜູ້ອ່ານນຳໃຊ້ຢ່າງຈິງຈັງ.

ເກີດເຈັບປ່ວຍໜັກ ແລະ ເສຍຊີວິດ.ເພາະປະຈຸບັນຍັງບໍ່ທັນມີຢາຊະນິດໃດປິ່ນປົວໃຫ້ຫາຍຂາດໄດ້.

ໂລກ ເອດສ໌ ແຜ່ກະຈາຍໄດ້ຢ່າງໃດ?

- ເຊື້ອໂລກເອດສ໌ ແຜ່ກະຈາຍຈາກຄົນໜຶ່ງ ໄປຍັງອີກຄົນໜຶ່ງແລ້ວໄປສູ່ອີກຄົນອື່ນໆ:
- ໂດຍການມີເພດສຳພັນກັບຄົນທີ່ຕິດເຊື້ອ ເອັດສ໌ໄອວີ;
- ເມື່ອເລືອດທີ່ບັນຈຸດ້ວຍເຊື້ອເອດສ໌ ທີ່ໄດ້ຮັບມາຈາກຮ່າງກາຍຂອງຄົນໜຶ່ງສູ່ອີກຄົນໜຶ່ງ ເຊັ່ນ ລະ ຫວ່າງການຖ່າຍເລືອດ ຫຼື ເຂັມ ແລະ ເຄື່ອງມືທີ່ແຫຼມຄົມປັກໃສ່.
- ຈາກແມ່ທີ່ຕິດເຊື້ອ, ຖືພາໄປທາງສາຍແຫ່ ສູ່ລູກທີ່ບໍ່ທັນເກີດ.

ເຊື້ອໄວຣັດ ໂລກເອດສ໌ ຈະບໍ່ແຜ່ເຊື້ອດ້ວຍການຖືກແມງໄມ້ກັດ, ການສຳຜັດ ຫຼື ການດູແລຄົນທີ່ຕິດເອດສ໌.

ຄູທຸກຄົນຕ້ອງມີຄວາມຮັບຜິດຊອບເພື່ອບັນຈຸການສິດສອນ ກ່ຽວກັບ ໂລກເອດສ໌, ການມີເພດສຳພັນ ແລະ ການຕິດເຊື້ອເອັດໄອວີເຂົ້າໃນບົດຮຽນ. ນອກນີ້ຍັງມີຫຼາຍໂອກາດ ສຳລັບ ການສອນ ກ່ຽວກັບ ໂລກເອດສ໌ ເມື່ອເດັກ ແລະ ຊາວໜຸ່ມຮວມຕົວກັນ ເຊັ່ນ: ໃນສະໂມ ສອນ, ກອງ ປະຊຸມທາງ ສາສະໜາ, ຊາວໜຸ່ມ ແລະ ເຍົາວະຊົນ ຫຼື ກຸ່ມນຳພາທ່ອງທ່ຽວ. ຜູ້ໃຫຍ່ທີ່ນຳພາ ພາກການສຶກສາເຫຼົ່ານີ້ ຄວນຄັດເລືອກກິດຈະກຳທີ່ເໝາະສົມ. (ຢູ່ໃນຕົວຢ່າງຕໍ່ໄປນີ້ ຄຳວ່າ “ຄູ” ສາມາດໃຊ້ກັບຜູ້ໃຫຍ່ທັງໝົດທີ່ ເຮັດວຽກກັບເດັກ).

ບົດທີ 3
ແນວຄວາມຄິດກ່ຽວກັບການສ້າງສະພາບແວດລ້ອມໂຮງຮຽນທີ່ສະອາດ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ

ສະພາບແວດລ້ອມຂອງໂຮງຮຽນ ອາດຈະເປັນໄພອັນຕະລາຍຕໍ່ພາວະສຸຂະພາບຂອງເດັກໃນໂຮງຮຽນ, ໂດຍສະເພາະ ຖ້າມີ ການເພີ້ມທະວີການເປີດໂປງຄວາມສ່ຽງອັນຕະລາຍ ເຊັ່ນ: ພະຍາດຕິດຕໍ່. ເດັກທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງຫຼາກຫຼາຍ ຈະມີຄວາມອ່ອນໄຫວ່ງ່າຍເປັນພິເສດ ຕໍ່ບັນຫາ ສຸຂະພາບທີ່ອ່ອນແອ ບໍ່ແຂງແຮງ ແລະ ການຂາດໂພຊະນາການ. ການບໍລິການສິ່ງອຳນວຍ ຄວາມສະດວກສາມາດທີ່ຈະໃຫ້ເປັນປະໂຫຍດ ແກ່ເດັກເຫຼົ່ານີ້ຫຼາຍທີ່ສຸດ ໂດຍຜ່ານການຊຸກຍູ້ສິ່ງເສີມ ຄວາມຊິນເຄີຍກັບສຸຂະອະນາໄມທີ່ຖືກຕ້ອງ ແລະ ການເຮັດວຽກຮ່ວມກັບ ພໍ່ແມ່ ຜູ້ປົກຄອງ ແລະ ຄອບຄົວ ເພື່ອປັບປຸງການມີນ້ຳ ທີ່ສະອາດ.

ສະພາບແວດລ້ອມໂຮງຮຽນທີ່ຖືກສຸຂະລັກສະນະ ໂດຍສະເພາະດ້ານການຍະພາບ ເປັນອີງປະກອບໜຶ່ງໃນນະໂຍບາຍສົ່ງເສີມສຸຂະພາບໃນໂຮງຮຽນ (ເບິ່ງລາຍລະອຽດໃນນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມສຸຂະພາບໃນໂຮງຮຽນ). ໂຮງຮຽນສາມາດທີ່ຈະຈັດໃຫ້ມີສະພາບແວດລ້ອມທີ່ມີປະສິດ ທິຜົນໄດ້ ແບບ ລັກສະນະງ່າຍໆ ແລະ ປອດໄພ. ໃນເອກະສານທີ່ຜ່ານມາ ພວກເຮົາໄດ້ຮຽນຮູ້ ກ່ຽວກັບຄວາມສຳຄັນຂອງທັກສະຊີວິດໃນການສຶກສາເດັກ ເພື່ອນຳໃຊ້ຄວາມຊິນເຄີຍທີ່ຖືກສຸຂະລັກສະນະ. ແຕ່ການສຶກສານີ້ ຈະໄດ້ຮັບຄວາມເຊື່ອຖືໜ້ອຍລົງ ຖ້າໂຮງຮຽນເຮົາບໍ່ມີນ້ຳສະອາດ ແລະ ບໍ່ມີສິ່ງ ອຳນວຍຄວາມສະດວກ ດ້ານສຸຂາພິບານທີ່ເໝາະສົມ.

ດັ່ງນັ້ນ, ເປົ້າໝາຍທີ່ເປັນຈິງກໍຄື ຮັບປະກັນໃຫ້ໄດ້ວ່າ ໂຮງຮຽນຂອງເຮົາໄດ້ສະເໜີ ໃຫ້ມີການສະໜອງນ້ຳສະອາດ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ. ດ້ວຍການສະໜອງ ບໍລິການຕ່າງໆ ແລະ ສິ່ງອຳນວຍຄວາມສະດວກເຫຼົ່ານີ້, ພວກເຮົາຈຶ່ງຈະສາມາດເພີ້ມກຳລັງ ການສ້າງທັກສະຊີວິດດ້ານສຸຂະພາບ ແລະ ສຸຂາພິບານ ແລະ ຂ່າວສານທີ່ພວກເຮົາພວມສື່ສານຢູ່, ແລະ ທາງໂຮງຮຽນ ກໍຈະສາມາດປະຕິບັດການເປັນຕົວຢ່າງ ສຳລັບນັກຮຽນ ແລະ ຊຸມຊົນທີ່ກວ້າງຂວາງ. ໃນທາງກັບກັນ, ມັນຈະນຳໄປສູ່ຄວາມຮຽກຮ້ອງ ຕ້ອງການການບໍລິການ ແລະ ສິ່ງອຳນວຍຄວາມສະດວກ ທີ່ເໝືອນກັນ ຂອງຊຸມຊົນ. ຍິ່ງໄປກວ່ານີ້, ຖ້າ ພວກເຮົາປະສົບຜົນສຳເລັດແລ້ວ ຊຸມຊົນຈະເບິ່ງໂຮງຮຽນ ແລະ ພວກເຮົາ ໃນທາງບວກຫຼາຍຂຶ້ນ ແລະ ພວກເຮົາຈະຮູ້ສຶກຕົວເອງ ວ່າມີບົດບາດທີ່ສຳຄັນທັງ ພາຍໃນ ແລະ ພາຍນອກໂຮງຮຽນຂອງເຮົາ.

1. ແນວທາງເພື່ອຈັດຕັ້ງປະຕິບັດນະໂຍບາຍ.

ກ່ອນທີ່ພວກເຮົາຈະສາມາດຕັ້ງຈຸດປະສົງ ແລະ ຮ່າງແຜນປະຕິບັດ, ພວກເຮົາຈຳເປັນຕ້ອງປະເມີນເບິ່ງສະພາບບັນຫາ ໃນປະຈຸບັນຂອງໂຮງຮຽນເຮົາ. ຂະບວນການນີ້ ຈະມີລາຍລະອຽດ 3 ບາດກ້າວຫຼັກດັ່ງນີ້:

1. ຕື່ມບັນຊີກວດກາດັ່ງລຸ່ມນີ້ໃຫ້ສົມບູນ (ຫຼື ສາມາດນຳໃຊ້ບັນຊີກວດກາໃນເອກະສານຍຸດທະສາດໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, 2005). ຢ່າລືມກະຕຸກຊຸກຍູ້ ການເຂົ້າຮ່ວມຂອງສະມາຊິກຊຸມຊົນ, ພະນັກງານແພດ, ພໍ່ແມ່ ຜູ້ປົກຄອງ ແລະ ເດັກໆ ໃນຂະບວນການປະເມີນຜົນ ແລະ ວາງແຜນປະຕິບັດ. ບາງກິດຈະກຳແບບມີສ່ວນຮ່ວມເພີ້ມເຕີມທີ່ທ່ານ ສາມາດເຮັດໄດ້ປະກອບດ້ວຍ:
   - ເຮັດວຽກຮ່ວມກັນເພື່ອສຳເລັດດ້ານຕ່າງໆ ຂອງການປະເມີນຜົນນະໂຍບາຍໂຮງຮຽນ;
   - ແຕ້ມແຜນທີ່ໂຮງຮຽນ ແລະ ຊຸມຊົນ ທີ່ຊີ້ໃຫ້ເຫັນບ່ອນໃຫ້ບໍລິການດ້ານສຸຂະພາບ, ແຫຼ່ງ ນ້ຳ, ວິດຖ່າຍ ແລະ ພື້ນທີ່ທີ່ເດັກ ແລະ ຜູ້ໃຫຍ່ ໂດຍປົກະຕິໄປຖ່າຍໜັກ ຫຼື ຖ່າຍເບົາ (ນີ້ອາດເປັນສ່ວນໜຶ່ງ ຫຼື ເປັນສ່ວນເພີ້ມເຕີມ ໃສ່ກິດຈະກຳການສ້າງແຜນທີ່ໂຮງຮຽນ- ຊຸມຊົນ ທີ່ໄດ້ສົນທະນາກັນໃນເອກະສານເຫຼັ້ມກ່ອນ;
   - ພັດທະນາບົດເລື່ອງຕ່າງໆ ທີ່ນຳສະເໜີສະຖານະພາບດ້ານສຸຂະພາບ ໃນຊີວິດຈິງທີ່ບໍ່ທັນ ເຮັດສຳເລັດໃນໂຮງຮຽນ ຫຼື ຊຸມຊົນຂອງທ່ານ;
   - ໃຫ້ເດັກແຕ້ມຮູບ ຫຼື ແຕ່ງບົດເລື່ອງທີ່ວາດໃຫ້ເຫັນເຖິງ “ໂຮງຮຽນ ແລະ ຊຸມຊົນທີ່ສະອາດ ແລະ ໃນຝັນຂອງເຮົາ.”

2. ຫຼັງຈາກນັ້ນ, ຈັດບູລິມະສິດການບໍລິການ ແລະ ສົ່ງອຳນວຍຄວາມສະດວກເຫຼົ່ານັ້ນ ຕາມທີ່ເຫັນວ່າ ມີຄວາມຈຳເປັນຮີບດ່ວນທີ່ສຸດ ເມື່ອພິຈາລະນາເບິ່ງສະຖານະພາບດ້ານສຸຂະພາບ ຂອງໂຮງຮຽນ ແລະ ຊຸມຊົນ.
3. ພັດທະນາແຜນປະຕິບັດງານ ເພື່ອໃຫ້ໄດ້ມີການບໍລິການ ແລະ ສົ່ງອຳນວຍຄວາມສະດວກເຫຼົ່ານີ້, ໝາຍວ່າຕ້ອງປັບປຸງສະຖານະພາບດ້ານສິ່ງແວດລ້ອມຂອງໂຮງຮຽນ. ທ່ານສາມາດທີ່ຈະນຳ ໃຊ້ຂະບວນການວາງແຜນປະຕິບັດງານ ໃນເອກະສານເຫຼັ້ມທີ່ຜ່ານມາ ເພື່ອເປັນແນວທາງໃນການ ພັດທະນາແຜນຂອງທ່ານ.

ຕົວຢ່າງການປະເມີນສະພາບດ້ານສິ່ງແວດລ້ອມກາຍະພາບ:

ໂຮງຮຽນຂອງພວກທ່ານມີສິ່ງອຳນວຍຄວາມສະດວກທີ່ສະໜອງຕໍ່ໄປນີ້:(ກວດເບິ່ງຖ້າມີ ໝາຍ✓)

_____ ມີການສະໜອງນ້ຳທີ່ປອດໄພສຳລັບດື່ມ, ໃຊ້ລ້າງມື ແລະ ການໃຊ້ວິດຖ່າຍທີ່ເໝາະສົມ ແລະ ສະດວກ;

_____ ມີການຕິດຕາມກວດກາ ແລະ ປົກປັກຮັກສາການສະໜອງນ້ຳຢູ່ສະເໝີ;

_____ ມີວິດຖ່າຍແຍກສຳລັບເດັກຍິງ ແລະ ເດັກຊາຍ ລວມທັງສຳລັບຄູຊາຍ ແລະຄູຍິງດ້ວຍ;

_____ ມີຈຳນວນວິດຖ່າຍເໝາະສົມທີ່ກຽມພ້ອມໃນໂຮງຮຽນສຳລັບທຸກຄົນໄດ້ເຂົ້າເຖິງ;

_____ມີການໃຊ້ນ້ຳສຳລັບລ້າງມື (ພ້ອມດ້ວຍຜ້າເຊັດມື)ຢ່າງສະມ່ຳສະເໝີ ແລະ ມີປະສິດທິຜົນ;

_____ ມີການອະນາໄມຫ້ອງນ້ຳເປັນປະຈຳ ແລະ ມີເຄື່ອງມືອະນາໄມພຽບພ້ອມ;

_____ ມີທ່ໍລະບາຍນ້ຳເສຍທີ່ຖືກຫຼັກສຸຂາພິບານ;

_____ ມີການກຳຈັດອາຈົມທີ່ປອດໄພ, ມີປະສິດທິຜົນ ແລະ ມີສຸຂະອະນາໄມ;

_____ມີການກຳຈັດ ແລະ / ຫຼື ກົນໄກນຳມາໃຊ້ໃໝ່ ບັນດາສິ່ງຂອງເສດເຫຼືອ (ເຊັ່ນ-ສິ່ງຂອງທີ່ຖິ້ມ ແລະ ຂີ້ເຫຍື້ອ)

ມືສະອາດ ແລະ ນ້ຳສະອາດສາມາດເຮັດໄປຄຽງຄູ່ກັນ ໃນການປ້ອງກັນພະຍາດໃນໂຮງຮຽນ ແລະ ໃນຄອບຄົວເດັກ. ໃນຂະນະທີ່ສິ່ງດັ່ງກ່າວອາດເໝືອນກັບວ່າມັນເປັນສາມັນສຳນຶກ ແຕ່ມັນກໍມັກ ຈະເປັນ ສິ່ງທ້າທາຍຫຼັກ ສຳລັບຫຼາຍໆໂຮງຮຽນ. ບາງຄັ້ງ ການຈູງໃຈໃນທີ່ນີ້ກໍບ່ໍມີ, ຄູກໍບ່ໍຄ່ອຍໝັ້ນໃຈເຖິງວິທີສິດສອນ ກ່ຽວກັບ ສຸຂະອະນາໄມ ແລະ ສຸຂາພິບານຢ່າງມີປະສິດທິຜົນ ລວມທັງວິທີປຸກລະດົມຊັບພະຍາກອນ ທີ່ ຈຳເປັນ ເຊິ່ງມັກໄດ້ມາຈາກຊຸມຊົນທີ່ວ່າ ຂໍໃຫ້ມີການກໍ່ສ້າງວິດຖ່າຍ ແລະ ການ ສະໜອງນ້ຳ. ຍຸດທະສາດທີ່ມີ ປະສິດທິຜົນທີ່ພວມໃຊ້ໃນປະຈຸບັນກໍຄື ການສຶກສາແບບເດັກຕໍ່ເດັກ ແລະ ເດັກຕໍ່ຜູ້ໃຫຍ່ ກ່ຽວກັບ ສຸຂະອະນາໄມ ແລະ ນ້ຳທີ່ປອດໄພ. ນີ້ຄືບາງກິດຈະກຳ ທີ່ທ່ານອາດນຳໄປພິຈາລະນາ ນຳໃຊ້ເພື່ອສົ່ງເສີມສຸຂະອະນາໄມ ແລະ ການ ສະໜອງນ້ຳທີ່ປອດໄພໃນໂຮງຮຽນ.

2. ກິດຈະກຳເພື່ອປະຕິບັດ: ການນຳເອົາເດັກເຂົ້າມີສ່ວນຮ່ວມໃນວຽກສຸຂະອະນາໄມສຶກສາ

ພະຍາດຖອກທ້ອງ, ແມ່ທ້ອງ, ອະຫິວາ, ໄທຟອຍ, ໂປລິໂອ ແລະ ພະຍາດອື່ນໆ ມີສາເຫດມາຈາກຈຸລິນຊີ (Germs). ຈຸລິນຊີເຫຼົ່ານີ້ ສາມາດຜ່ານຈາກຄົນໜຶ່ງໄປສູ່ຄົນອື່ນ ໂດຍຜ່ານທາງມື, ຂີ້ຝຸ່ນ, ອາຫານ ແລະ ເຄື່ອງດື່ມ. ນີ້ແມ່ນບາງກິດຈະກຳທີ່ທ່ານສາມາດສອດເຂົ້າໃນໂຄງການສຸຂະສຶກສາ ທີ່ອີງໃສ່ທັກສະພື້ນຖານ ໃນໂຮງຮຽນຂອງທ່ານ ເພື່ອປັບປຸງຄວາມຊິນເຄີຍດ້ານສຸຂະອະນາໄມຂອງເດັກ.

- **ສົນທະນາກຸ່ມ.** ເປັນຫຍັງເດັກບາງຄົນ - ໂດຍສະເພາະເດັກຍິງ-ບ່ໍຢາກໃຊ້ວິດຖ່າຍ ? ມີເດັກ ທີ່ບ່ໍຢາກມາໂຮງຮຽນຍ້ອນບ່ໍມີຫ້ອງນ້ຳ/ວິດຖ່າຍທີ່ເໝາະສົມສຳລັບເຂົາຫຼືບ່ໍ ? ໃຫ້ສົນທະນາ ກັນ ກ່ຽວກັບເຫດຜົນເຫຼົ່ານີ້ **ແລ້ວຕົກລົງແນວທາງ** ການຊຸກຍູ້ໃຫ້ໃຊ້ວິດຖ່າຍ. ນີ້ເປັນປະເດັນບັນຫາທີ່ສຳຄັນ ຍ້ອນວ່າ ການຂາດສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ (ວິດຖ່າຍ) ສຳລັບເດັກຍິງ ຫຼື ຖ້າມີ, ກໍແຍກອອກຈາກເດັກຊາຍ ເປັນເຫດຜົນສຳຄັນສຳລັບ ເດັກຍິງ ທີ່ບ່ໍຢາກມາໂຮງຮຽນ (ໂດຍສະເພາະໃນເຂດ

ອາຊີໃຕ້). ເດັກຍິງບໍ່ຢາກໃຊ້ວິດຖ່າຍ ຮ່ວມກັບ ເດັກຊາຍ (ດ້ວຍເຫດຜົນທັງທາງດ້ານ ຄວາມສຸພາບ ແລະ ຄວາມປອດໄພ). ອັດຕາການຕິດເຊື້ອທາງປັດສະວະເກີດທີ່ກັບ ເດັກຍິງມີສູງ ອີງຕາມການລາຍງານໃນປະເທດໜຶ່ງຂອງ ທະວີບອາຊີໃຕ້ ຍ້ອນວ່າ ເຂົາບໍ່ສາມາດໃຊ້ວິດຖ່າຍໃນຊ່ວງເຂົ້າໂຮງຮຽນໝົດມື້.

- **ສົນທະນາກຸ່ມ.** ເວົ້າລົມ ກ່ຽວກັບ ແນວທາງການສິດສອນເດັກໜຸ່ມ ເດັກຊາຍ ແລະ ເດັກຍິງ ໃຫ້ ໃຊ້ວິດຖ່າຍ ແລະ ຮັກສາຄວາມສະອາດ, ແລະ ເຫດຜົນທີ່ມັນມີຄວາມ ສຳຄັນ. ເດັກທີ່ໃຫຍ່ກວ່າ ສາມາດທີ່ຈະສົນທະນາບາງຢ່າງທີ່ຊ່ອຍໃຫ້ຈຸລິນຊີ ແຜ່ກະ ຈາຍ. ຕົວຢ່າງ: ອາດຈະນຳເອົາເສດ ເສື້ອຜ້າຈັກໜຶ່ງຊຶ້ນມາຖູພື້ນ ແລ້ວປະຖິ້ມໄວ້ ແຖວໆນັ້ນ ຫຼື ພຽງແຕ່ດຶງ ເດັກປະຕິນເປົ່າອອກມາ ຢຽບພື້ນ.
- **ຫຼິ້ນບົດບາດສົມມຸດກ່ຽວກັບການປະຕິບັດສຸຂະອະນາໄມທີ່ດີ.**
ເຝິກຫັດຄວາມຊິນເຄີຍທີ່ດີໃນໂຮງຮຽນກັບເດັກ; ຕົວຢ່າງ: ການໃຊ້ວິດຖ່າຍ; ການ ຮັກສາຄວາມສະອາດ; ຮັກສາມືໃຫ້ສະອາດຫຼັງຈາກໃຊ້ວິດຖ່າຍ; ລ້າງມືກ່ອນກິນອາ ຫານ. ຊຸກຍູ້ໃຫ້ນັກຮຽນ ສະແດງອອກໃຫ້ເຫັນການປະຕິບັດທີ່ເປັນນິໄສເຄີຍຊິນທີ່ ຖືກສຸຂະອະນາໄມທີ່ດີ.
- **ບົດເລື່ອງຕ່າງໆ.** ໃຫ້ເດັກຂຽນບົດເລື່ອງຕ່າງໆກ່ຽວກັບ: ເມື່ອໃດ, ເຮັດແນວໃດ ແລະ ຍ້ອນ ຫຍັງ ເຂົາຈຶ່ງຄວນປະຕິບັດສຸຂະນິໄສທີ່ດີ.
- **ການເຮັດວຽກເປັນທີມງານ.**ສ້າງຕັ້ງກຸ່ມເພື່ອເຮັດການກວດກາວິດຖ່າຍປົກກະຕິ.
ກຸ່ມດັ່ງກ່າວ ສາມາດກວດເຊັກວ່າ ຮູວິດໄດ້ຖືກປົດໄວ້ ແລະ ສະອາດ. ຖ້າມັນບໍ່ສະ ອາດ, ກຸ່ມສາມາດ ລາຍງານ ໃຫ້ຄູ ຫຼື ພະນັກງານແພດຮັບຊາບ ແລະ ຂໍຄຳແນະນຳ ກ່ຽວກັບ ວິທີທຳຄວາມສະອາດວິດຖ່າຍ. ກິດຈະກຳນີ້ຈະຊ່ອຍ ໃຫ້ພວກເຂົາພັດທະ ນາທັກສະຊີວິດທີ່ສຳຄັນ ເຊັ່ນ ທັກສະການຕັດສິນໃຈ, ການສື່ສານ ແລະ ການພົວ ພັນລະຫວ່າງບຸກຄົນ.

- **ການສາທິດສ້າງວິດຖ່າຍໃນໂຮງຮຽນ ຫຼື ຊຸມຊົນ.**
ເດັກທີ່ໃຫຍ່ກວ່າ ສາມາດທີ່ຈະສ້າງວິດຖ່າຍຂະໜາດ ສຳລັບ ເດັກໃນບໍລິເວນໂຮງ ຮຽນ ຕົວຢ່າງ: ວັດແທກຫຼຸມ ແລ້ວເຮັດຊ່ອງ ສຳລັບໃສ່ແຜ່ນຮອງຢຽບ. ຄູ ຫຼື ຜູ້ໃຫຍ່ ຄວນແນະນຳຊ່ອຍເຫຼືອເດັກ ທີ່ເຮັດການກໍ່ສ້າງດ້ວຍເຂົາເອງ. ພໍ່ແມ່ຜູ້ປົກຄອງ ສາມາດຊ່ອຍເຫຼືອດ້ວຍ ການສະໜອງວັດຖຸດິບ ເຊັ່ນ ຊາຍ, ຊີມັງ, ໄມ້ ແລະ ອື່ນໆ. ເດັກສາມາດຈັດກັນເປັນກຸ່ມອີງຕາມສະຖານທີ່ທີ່ເຂົາມາ. ໃນຫ້ອງຮຽນ, ເຂົາສາມາດ ທີ່ຈະພັດທະນາແຜນ ເພື່ອຊ່ອຍ ເຫຼືອກັນສ້າງວິດຖ່າຍຂະໜາດເດັກທີ່ເຮືອນຂອງເຂົາ. ແຜນພູມທີ່ສະແດງຄວາມກ້າວໜ້າ ໃນຫ້ອງຮຽນສາມາດສະແດງໃຫ້ແຕ່ລະເຮືອນ ທີ່ມີເດັກນ້ອຍໄດ້ເບິ່ງ. ໃຫ້ໝາຍຕິກ (✓) ໃສ່ເມື່ອວິດຖ່າຍຖືກສ້າງຂຶ້ນທີ່ເຮືອນ ແລະ

ຕິກ (✓) ອີກ ເມື່ອເດັກນ້ອຍນັ້ນໄດ້ຮຽນຮູ້ ວິທີໃຊ້ມັນແລ້ວ. ສິ່ງນີ້ອາດສາມາດເຮັດ ແຍກກັນ ລະຫວ່າງເດັກຊາຍ ແລະ ເດັກຍິງ.

- **ຕິດຕາມການຮຽນຮູ້.** ຢູ່ໃນການສົນທະນາກຸ່ມ ຫຼື ໂດຍຜ່ານການຊຽນປົດ ບອກໃຫ້ ເດັກ ອະທິບາຍດັ່ງນີ້:

✓ ອັນໃດເປັນສາເຫດຂອງພະຍາດຖອກທ້ອງ ແລະ ພະຍາດຖອກທ້ອງສາມາດປ້ອງ ກັນໄດ້ຢ່າງໃດ;
✓ ເປັນຫຍັງຈຶ່ງເປັນສິ່ງສຳຄັນ ໃນການລະວັງກ່ຽວກັບອາຈົມຂອງເດັກ;
✓ ມີສຸຂະນິໄສທີ່ດີອັນໃດແດ່ທີ່ສາມາດຊ່ວຍຢຸດຢັ້ງການແຜ່ກະຈາຍຂອງເຊື້ອຈຸລິນຊີ;
✓ ປະຈຸບັນມີວິດຖ່າຍ ແລະ ບ່ອນລ້າງມືຢູ່ໂຮງຮຽນບໍ່;
✓ ມີຈັກຄອບຄົວທີ່ມີວິດຖ່າຍພິເສດ ຫຼືມີທີ່ພິເສດສຳລັບເດັກອ່ອນຖ່າຍ;
✓ ເດັກໄດ້ຊ່ວຍເຫຼືອການເຮັດວິດຖ່າຍພິເສດແນວໃດ;
✓ ເດັກໄດ້ຊ່ວຍນອ້ງຊາຍ ຫຼື ນ້ອງສາວຮຽນຮູ້ການສຸຂະອະນາໄມທີ່ດີຄືແນວໃດ. ບອກ ໃຫ້ເຂົາ ພັນລະນາສິ່ງທີ່ເຂົາໄດ້ເຮັດ.

- **ຊຸກຍູ້ການມີສ່ວນຮ່ວມຂອງຊຸມຊົນ.** ຄູ ແລະ ພະນັກງານແພດສາມາດ ທີ່ຈະເນັ້ນ ໜັກໃສ່ຄວາມສຳຄັນຂອງການຮັກສາຄວາມສະອາດ ແລະ ການໃຊ້ວິດຖ່າຍ ເພື່ອ ປ້ອງກັນ ການແຜ່ກະຈາຍຂອງພະຍາດຖອກທ້ອງ. ປົດຮຽນກ່ຽວກັບວິທະຍາສາດ ສາມາດນຳໃຊ້ ລັບການຮຽນຮູ້ ກ່ຽວກັບຈຸລິນຊີເພີ້ມ; ຕົວຢ່າງ: ຈຸລິນຊີແມ່ນຫຍັງ ແລະ ມັນແຜ່ກະຈາຍພະຍາດໄດ້ຢ່າງໃດ. ຄູ ແລະ ພໍ່ແມ່ ຜູ້ປົກຄອງສາມາດເຮັດວຽກຮ່ວມ ກັບເດັກທີ່ໃຫຍ່ກວ່າ ເພື່ອວາງ ແຜນ ແລະ ສ້າງວິດຖ່າຍໃຫ້ເໝາະສົມກັບເດັກ.

- ຊຸກຍູ້ການມີສ່ວນຮ່ວມຂອງເດັກ. ເດັກໃນໂຮງຮຽນ, ໂດຍຜ່ານອົງການເຍົາວະຊົນ, ກຸ່ມນຳທ່ຽວ ແລະ ສາດສະໜາ ສາມາດເຜີຍແຜ່ແນວຄວາມຄິດສຸຂະອະນາໄມທີ່ດີ, ອາຫານມີປະໂຫຍດ, ນ້ຳສະອາດ ແລະ ການຮັກສາຄວາມສະອາດ ໂດຍຜ່ານ ຕົວຢ່າງທີ່ດີຂອງເຂົາ. ພວກເຂົາສາມາດທີ່ຈະສອນເດັກທີ່ນ້ອຍກວ່າ ກ່ຽວກັບວິທີໃຊ້ ວິດຖ່າຍ ແລະ ການຮັກສາອະນາໄມຕົນເອງ ແລະ ຊ່ວຍສ້າງວິດຖ່າຍຂະໜາດ ທີ່ເໝາະສົມກັບເດັກ ໃນບ່ອນທີ່ຕ້ອງການ.

ຕົວຢ່າງແຜນການສອນປົດຮຽນ - ພະຍາດຖອກທ້ອງ

<u>ຈຸດປະສົງຂອງການຮຽນຮູ້:</u>
ເພື່ອໃຫ້ນັກຮຽນສາມາດອະທິບາຍສາເຫດຂອງການເປັນພະຍາດຖອກທ້ອງໄດ້.

<u>ອຸປະກອນການສອນ:</u> ຮູບພາບ (ວິດຖ່າຍ, ບໍ່ປ້ອງກັນແມງວັນ, ສະແດງໃຫ້ເຫັນແມງວັນ, ອາຫານທີ່ແມງວັນຕອມ, ເດັກກິນອາຫານ, ເຈັບທ້ອງ/ເຈັບກະເພາະ, ທຽວຖ່າຍ).

ກິດຈະກຳການສອນ/ການຮຽນ:

1. ບອກໃຫ້ນັກຮຽນເບິ່ງທີ່ຮູບພາບໃນກຸ່ມ ແລ້ວໃຫ້ຕອບຄຳຖາມດັ່ງຕໍ່ໄປນີ້:
   ກ. ເຈົ້າເຫັນຫຍັງແດ່?
   ຂ. ມີຫຍັງເກີດຂຶ້ນກັບເດັກໃນຮູບ? ຍ້ອນຫຍັງ?
2. ບອກໃຫ້ນັກຮຽນຮູ້ວ່າເດັກທີ່ຢູ່ໃນຮູບພາບນັ້ນເຈັບທ້ອງ, ທ້ອງໄປຖ່າຍເລື້ອຍໆ ແລະ ຮາກເປັນບາງຄັ້ງ. ບອກໃຫ້ນັກຮຽນວ່າ ນີ້ເອີ້ນວ່າພະຍາດຖອກທ້ອງ.

3. ສືບຕໍ່ອະທິບາຍວ່າ ການເກີດພະຍາດຖອກທ້ອງມີສາເຫດມາຈາກ:
   ກ. ການກິນອາຫານດ້ວຍມືເປື້ອນ (ມືບໍ່ລ້າງ)
   ຂ. ການກິນອາຫານທີ່ບໍ່ຖືກອະນາໄມ(ອາຫານສົກກະປົກ)
   ຄ. ການກິນອາຫານທີ່ແມງວັນຕອມ
   ງ. ການກິນອາຫານທີ່ບໍ່ສົດ (ບູດເໜົ່າ)
   ຈ. ການດື່ມນ້ຳທີ່ບໍ່ສະອາດ ແລະ ບໍ່ປອດໄພ.

ທີ່ມາ: Zarchin J., Aung T.M. and Jenkins J. (2001) Skills-based Health Education and Life Skills – The Myanmar Experience SHAPE Project, UNICEF Country Office for Myanmar.

3. ການນຳເອົາເດັກເຂົ້າມີສ່ວນຮ່ວມໃນການສະໜອງນ້ຳທີ່ປອດໄພ

ໃນການສິດສອນເດັກ ກ່ຽວກັບ ນ້ຳ ແລະ ສຸຂະອະນາໄມນັ້ນ, ສິ່ງສຳຄັນ ກໍຄື ຕ້ອງ ສື່ສານວ່າທຸກໆສິ່ງ ທີ່ມີຊີວິດຕ້ອງການນ້ຳ, ແຕ່ຫາກເປັນນ້ຳສົກກະປົກ ມັນສາມາດທີ່ຈະເຮັດໃຫ້ ເຮົາເຈັບປ່ວຍ. ພວກເຮົາຕ້ອງມີ ຄວາມລະມັດລະວັງ ໃນການຮັກສານ້ຳໃຫ້ສະອາດ ແລະ ປອດ ໄພ ໂດຍສະເພາະ ໃນບ່ອນທີ່ຄົ້ນພົບ, ເມື່ອພວກເຮົານຳເອົາເມືອເຮືອນ, ເມື່ອພວກເຮົາເກັບຮັກ ສາໄວ້ ແລະ ເມື່ອພວກເຮົານຳໃຊ້. ໃນທີ່ນີ້ມີບາງກິດຈະກຳ ທີ່ທ່ານສາມາດສອດແຊກເຂົ້າ ໃນ ແຜນງານດ້ານສຸຂະສຶກສາທີ່ ອີງໃສ່ທັກສະພື້ນຖານຂອງໂຮງຮຽນ ເພື່ອປັບປຸງນ້ຳໃຫ້ມີຄວາມ ປອດໄພ.

- **ເດັກສາມາດສົນທະນາອະພິປາຍ:** ເປັນຫຍັງນ້ຳຈຶ່ງມີຄວາມສຳຄັນ?. ໃຫ້ຂຽນເປັນບັນຊີ ລາຍການ ທັງໝົດທີ່ເຈົ້າສາມາດເຮັດໄດ້ກັບນ້ຳທີ່ເຮືອນ, ໃນຊຸມຊົນ, ໃນໂຮງໝໍ, ໃນຟາມ, ແລະ ໃນປະເທດທັງໝົດ. ໃນບັນດາບັນຊີລາຍການທີ່ຂຽນມານັ້ນມີອັນໃດແດ່ທີ່ ພວກເຮົາ ມັກໃຊ້ ນ້ຳສະອາດ? ນ້ຳທີ່ໄສ ແລະ ມີລົດຊາດດີ ເປັນນ້ຳດື່ມທີ່ ປອດໄພ ແລະ ສະອາດ ສະໝີໄປບໍ່? (ຄຳຕອບກໍຄືບໍ່. ຍ້ອນຫຍັງ?). ຈຸລິນຊີເຂົ້າໄປໃນນ້ຳໄດ້ຢ່າງໃດ? ນ້ຳສາ ມາດຊ່ອຍພວກເຮົາໃນທາງໃດແດ່? ນ້ຳສາມາດທຳຮ້າຍເຮົາໃນທາງໃດແດ່? ເດັກບາງ

ຄົນມັກເຈັບທ້ອງ ຫຼື ເປັນ ພະຍາດຖອກທ້ອງບໍ? ມີຄົນໃນຄອບຄົວເປັນ ເຊັ່ນດຽວກັນນີ້ບໍ? ເດັກອ່ອນເດ? ເຈົ້າຄິດວ່າ ອັນໃດເປັນສາເຫດໃຫ້ເກີດການເຈັບປ່ວຍນີ້?.

- **ການເຮັດວຽກເປັນກຸ່ມໃນຊຸມຊົນ.** ຢູ່ໃນກຸ່ມນ້ອຍ, ອະນຸຍາດໃຫ້ເດັກໄປເບິ່ງແຫຼ່ງນ້ຳຢູ່ໃນຊຸມຊົນແລ້ວສ້າງແຜນທີ່ ເພື່ອສະແດງໃຫ້ເຫັນແຫຼ່ງນ້ຳມີຢູ່ໃສແດ່ (ໃຫ້ໃຊ້ປະໂຫຍດຈາກແຜນທີ່ໂຮງຮຽນ-ຊຸມຊົນ ຖ້າທ່ານໄດ້ພັດທະນາແລ້ວ). ຈາກນັ້ນ, ຄົ້ນເບິ່ງວ່າແຫຼ່ງນ້ຳໃດສະອາດດີ ແລະ ແຫຼ່ງນ້ຳໃດສົກກະປົກ. ໃຫ້ບັນທຶກສິ່ງເຫຼົ່ານີ້ລົງໃສ່ແຜນທີ່. ຖ້າແຫຼ່ງນ້ຳສົກກະປົກ, ແມ່ນຫຍັງເຮັດໃຫ້ມັນສົກກະປົກ? ໃຫ້ເຝົ້າເບິ່ງວິທີເອົານ້ຳ ແລະ ຂົນນ້ຳເມືອເຮືອນຂອງປະຊາຊົນ. ນ້ຳຖືກເກັບຮັກສາໃຫ້ສະອາດ ແລະ ປອດໄພບໍ່? ໃຫ້ສົນທະນາ ອະພິປາຍສິ່ງທີ່ເຈົ້າໄດ້ເຫັນກັບຜູ້ອື່ນໆ.

- **ການເຮັດວຽກເປັນກຸ່ມທີ່ໂຮງຮຽນ.** ໃຫ້ຂຽນເປັນບັນຊີລາຍການຂອງຄວາມເຈັບປ່ວຍທີ່ສາມາດ ແຜ່ກະຈາຍຜ່ານທາງນ້ຳທີ່ບໍ່ປອດໄພ ແລະ ຄົ້ນເບິ່ງເພີ້ມອີກກ່ຽວກັບມັນ. ໃຫ້ສຳຫຼວດແຫຼ່ງນ້ຳ ຂອງໂຮງຮຽນ. ນ້ຳນີ້ມາຈາກໃສ? ວິດຖ່າຍຕັ້ງຢູ່ໃກ້ກັບແຫຼ່ງນ້ຳບໍ່? ຖັງບັນຈຸນ້ຳໄດ້ຖືກທຳຄວາມສະອາດເລື້ອຍສ່ຳໃດ? ໄດ້ໃຊ້ຈອກ/ໂອບໍ່? ມີກະບວຍ/ໂອມີກ້ານຈັບບໍ່?ຈອກ ແລະ ກະບວຍ ຖືກລ້າງກ່ອນ ແລະ ຫຼັງໃຊ້ບໍ່? ມີບ່ອນລ້າງມື ກ່ອນກິນ ແລະ ດື່ມບໍ່? ນັກຮຽນໃຊ້ມັນເປັນປະຈຳບໍ່?

- **ການເຮັດວຽກເປັນລາຍບຸກຄົນທີ່ບ້ານ.**
  ເດັກເຮັດເປັນບັນຊີລາຍການຖັງບັນຈຸນ້ຳທັງໝົດທີ່ໃຊ້ຢູ່ເຮືອນ. ເຮັດລາຍການບັນຊີຄົນໃນຄອບຄົວທີ່ເຄີຍເຈັບປ່ວຍ ຍ້ອນມີສາເຫດມາຈາກນ້ຳສົກກະປົກ. ໃຜເປັນຜູ້ຕັກນ້ຳ/ຂົນນ້ຳມາໃຊ້ໃນເຮືອນ? ທ່ານສາມາດຊ່ວຍເຂົາໄດ້ບໍ່? ໃຜເປັນຜູ້ເກັບຮັກສານ້ຳໃຫ້ສະອາດ ແລະ ປ້ອງກັນ? ຖັງບັນຈຸນ້ຳຖືກປົກປິດໄວ້ບໍ່? ມີກະບວຍຕັກນ້ຳບໍ່? ພວກເຂົາລ້າງມືຫຼັງໃຊ້ວິດຖ່າຍ ແລະ ກ່ອນກິນ ແລະ ດື່ມບໍ່? ໃຫ້ຄົ້ນຄວ້າຮ່ຳຮຽນ ຈາກພະນັກງານແພດ ເພື່ອຫາແນວທາງທີ່ດີທີ່ສຸດ ເພື່ອຈະໄດ້ນ້ຳດື່ມທີ່ສະອາດໃນຊຸມຊົນ.

4. ເດັກສາມາດຊ່ວຍເຫຼືອໄດ້

ເດັກສາມາດທີ່ຈະຊ່ວຍດູແລຮັກສານ້ຳໃຫ້ສະອາດ,
ພວກເຂົາສາມາດທີ່ຈະຄົ້ນພົບບັນດາກິດຈະກຳ ທີ່ເໝາະສົມກັບອາຍຸຂອງເຂົາ ແລະ ສາມາດເຮັດຜູ້ດຽວ ຫຼື ເປັນທີມ ຫຼື ເປັນຄູ່. ໃນທີ່ນີ້ຈະມີບາງ ຕົວຢ່າງຂອງສິ່ງທີ່ເຂົາສາມາດເຮັດໄດ້.

- ທີ່ແຫຼ່ງນ້ຳ, ເດັກສາມາດຊ່ວຍຮັກສາແຫຼ່ງສະໜອງນ້ຳໃຫ້ສະອາດ. ອະທິບາຍໃຫ້ເດັກນ້ອຍຟັງ ວ່າເຂົາບໍ່ຄວນຖ່າຍເບົາລົງໃນນ້ຳ ຫຼື ຖ່າຍໜັກໃກ້ແຫຼ່ງນ້ຳ. ເກັບຂີ້ເຫຍື້ອ ແລະ ສິ່ງເສດເຫຼືອອື່ນໆ ອອກຈາກແຄມແຫຼ່ງນ້ຳ ແລະ ເອົາໄປຖິ້ມທີ່ອື່ນ ເພື່ອກຳຈັດ. ຮັກສາ

ສັດໃຫ້ຢູ່ຫ່າງຈາກແຫຼ່ງນ້ຳ. ບ່ອນໃດທີ່ມີກ໊ອກນ້ຳ, ກໍໃຫ້ຊ່ອຍປະຊາຊົນນຳໃຊ້. ນີ້ອາດ ໝາຍເຖິງການຊ່ອຍເຫຼືອຜູ້ເຖົ້າຕັກ ແລະ ຂົນນ້ຳ. ຮັບປະກັນວ່າ ກ໊ອກນ້ຳຕ້ອງໄດ້ປິດຫຼັງ ຈາກໃຊ້. ບ່ອນທີ່ມີນ້ຳສ້າງ, ທີ່ອ້ອມແອ້ມ ນ້ຳສ້າງຕ້ອງຮັກສາຄວາມສະອາດສະເໝີ. ຖ້າມີກ້ອນຫີນ, ໃຫ້ຊ່ອຍກໍ່ຝານ້ອຍໆອ້ອມນ້ຳສ້າງ. ກວດເບິ່ງວ່າ ເຊືອກ ແລະ ຖັງ/ຄຸ ບັນຈຸນ້ຳສະອາດ ຫຼືບໍ່. ຊ່ອຍສ້າງສິ່ງສະໜັບສະໜູນ (ເຊັ່ນຂໍເກາະ ເພື່ອຫ້ອຍຄຸ/ເຊືອກ) ບໍ່ໃຫ້ວາງໄວ້ພື້ນດິນ. ຖ້າບໍ່ມີ ຝາປິດສ້າງ ກໍຊ່ອຍເຮັດ ຖ້າເປັນໄປໄດ້. ຖ້າມີຄຸຕັກນ້ຳ ສະເພາະໄວ້ໃຫ້, ຕ້ອງແນ່ໃຈວ່າປະຊາຊົນບໍ່ໄດ້ຮັບອະນຸຍາດ ໃຫ້ໃຊ້ຄຸ/ພາຊະນະ ຂອງ ຕົນຕັກນ້ຳສ້າງ. ຖ້າມີເຄື່ອງຈັກປ໊ັມນ້ຳ ກໍຕ້ອງແນ່ໃຈວ່າ ປະຊາຊົນໃຊ້ມັນດ້ວຍຄວາມ ລະມັດລະວັງ. ບໍ່ຄວນໃຊ້ມັນແບບຮຸນແຮງເກີນໄປ ແລະ ບໍ່ຄວນໃຊ້ເປັນການຫຼິ້ນ.

- **ເມື່ອປະຊາຊົນໄປຕັກນ້ຳ ແລະ ເອົາເມື່ອເຮືອນ**. ໃຫ້ອະທິບາຍວ່າຄຸ/ຖັງບັນຈຸນ້ຳ ຕ້ອງ ໃຫ້ມັນສະອາດສະເໝີ. ຖ້ານ້ຳໃນສ້າງບໍ່ສະອາດ, ໃຫ້ອະທິບາຍຕໍ່ປະຊາຊົນ ໃຫ້ເຂົາເອົາ ໄປຕອງ ຫຼື ຕົ້ມໃຫ້ສຸກ ກ່ອນໃຊ້.

- **ທີ່ເຮືອນ.** ໃຫ້ອະທິບາຍໃຫ້ເດັກນ້ອຍຮູ້ວ່າ: ບໍ່ຄວນຈຸ່ມມື, ສິ່ງຂອງເປື້ອນເປິ, ຫຼື ສິ່ງອື່ນໆ ລົງໃນນ້ຳ, ຄວນໃຊ້ກະບວຍ/ໂອຕັກນ້ຳ. ຊ່ອຍຮັກສາຖັງບັນຈຸນ້ຳ ເພື່ອເກັບຮັກສານ້ຳໃຫ້ ສະອາດ. ຊ່ອຍເດັກທີ່ນ້ອຍກວ່າ ໃນການໃຊ້ກະບວຍ ເພື່ອຕັກນ້ຳຈາກຖັງເກັບນ້ຳ. ສອນ ໃຫ້ເຂົາວາງຝາປິດຖັງເກັບນ້ຳເມື່ອເອົານ້ຳແລ້ວ. ຢ່າວາງຝາປິດໃສ່ພື້ນເວລາເອົານ້ຳອອກ ຈາກຖັງບັນຈຸ. ຫຼີກລ້ຽງການເຮັດໃຫ້ນ້ຳເຟືອດໃສ່ພື້ນ ແລະ ເກັບກະບວຍ ຫຼື ພາຊະນະ ໃຊ້ຕັກນ້ຳໄວ້ບ່ອນທີ່ສະອາດ. ຄວນວາງໄວ້ບ່ອນທີ່ສັດບໍ່ສາມາດຈະເຂົ້າເຖິງ ແລະ ບໍ່ວາງ ໄວ້ພື້ນ.

5. ການຕິດຕາມ

ຫຼັງຈາກຫຼາຍອາທິດ ຫຼື ຫຼາຍເດືອນ, ແນະນຳໃຫ້ເດັກສົນທະນາຮ່ວມກັບເດັກຜູ້ອື່ນໆ ໃນສິ່ງ ທີ່ເຂົາໄດ້ຈື່ຈຳມາ; ພວກເຂົາໄດ້ເຮັດຫຍັງແດ່ເພື່ອເຮັດໃຫ້ນ້ຳສະອາດ ແລະ ປອດໄພຂຶ້ນ; ແລະ ມີຫຍັງອີກທີ່ເຂົາສາມາດເຮັດໄດ້. ສະຖານທີ່ ທີ່ນຳໃຊ້ນ້ຳ ສະອາດຂຶ້ນບໍ? ຂີ້ເຫຍື້ອ ສິ່ງເສດ ເຫຼືອ ໄດ້ຖືກອະນາໄມບໍ? ຖັງເກັບນ້ຳສະອາດຢູ່ສະເໝີບໍ ໂດຍສະເພາະ ແມ່ນທາງຂ້າງນອກ? ເດັກລ້າງມືຫຼາຍຂຶ້ນຫຼັງຈາກຖ່າຍໜັກ ແລະ ກ່ອນກິນອາຫານ ບໍ ? ຍັງມີຄົນເຈັບປ່ວຍຫຼາຍປານ ໃດ ຈາກນ້ຳທີ່ບໍ່ສະອາດ ?

ຂໍ້ແນະນຳພິເສດເພື່ອປັບປຸງສະພາບແວດລ້ອມຂອງໂຮງຮຽນຂອງທ່ານ

(ຂໍ້ມູນຄວາມຮູ້ດັ່ງຕໍ່ໄປນີ້ ຖືກພັດທະນາໂດຍ ທ່ານ ກາຣິນ ເມແຕລ, ກ່າວເຖິງແນວທາງ ທີ່ຈະຊ່ອຍສ້າງ ສະພາບແວດລ້ອມຂອງໂຮງຮຽນທີ່ຖືກສຸຂະອະນາໄມ ແລະ ສົ່ງເສີມສຸຂະພາບ)

1. ປະເມີນສະພາບແວດລ້ອມຂອງໂຮງຮຽນ.
   ທ່ານຈະສາມາດເຮັດໃຫ້ມັນມີລັກສະນະເປັນເພື່ອນມິດ ໃນການຮຽນຮູ້, ປອດໄພ ແລະ ສົ່ງເສີມສຸຂະພາບໄດ້ຢ່າງໃດ? ກຳນົດ/ລະບຸຫ້າຂົງເຂດເພື່ອການ ປັບປຸງແບບງ່າຍໆ ແລະ ສ້າງແຜນປະຕິບັດຮ່ວມກັບເດັກ
2. ປະເມີນຮ່ວມກັນ ນິໄສຄວາມຊິນເຄີຍດ້ານສຸຂະອະນາໄມຂອງເດັກ ແລະ ພໍ່ແມ່ ຜູ້ປົກຄອງ ຂອງເຂົາ ໃນໂຮງຮຽນ ແລະ ຄອບຄົວ. ກຳນົດ/ລະບຸ 5 ພຶດຕິກຳ ທີ່ບໍ່ຖືກຕ້ອງ ທີ່ມີຜົນກະທົບ ຕໍ່ສຸຂະພາບ ຂອງ ເດັກ ແລະ ຕັ້ງເປົ້າໝາຍ ເພື່ອປ່ຽນແປງ.
3. ຕ້ອງແນ່ໃຈວ່າ ເດັກມີນ້ຳທີ່ປອດໄພສຳລັບດື່ມໃນໂຮງຮຽນ!
4. ຈັດຕັ້ງເປັນປະຈຳ “ວັນໂຮງຮຽນສະອາດ ແລະ ສົ່ງເສີມສຸຂະພາບ”. ຕົວຢ່າງ: ນັກຮຽນທຸກຄົນ ສາມາດທຳຄວາມສະອາດບໍລິເວນໂຮງຮຽນຂອງເຂົາ ອາທິດລະຄັ້ງ.
5. ຄັດເລືອກ “ເດັກຜູ້ຕິດຕາມເລື່ອງສຸຂະພາບ” ຜູ້ທີ່ຈະລາຍງານການເກີດມີພະຍາດ ໃນຊຸມຊົນ ຂອງເຂົາ. ເຊື່ອມໂຍງການຕິດຕາມໃສ່ປະຕິບັດການດ້ານສະພາບແວດລ້ອມ.
6. ເຊີນຊວນເດັກສ້າງແຜນທີ່ສະພາບແວດລ້ອມຂອງຊຸມຊົນ ເພື່ອກຳນົດ/ລະບຸ ຊັບພະຍາກອນ ແລະ ພື້ນທີ່ ທີ່ຈຳເປັນຕ້ອງປົກປັກຮັກສາ ແລະ ປັບປຸງ. ປະຕິບັດການໄດ້ເລີຍ!
7. ນຳເອົາພໍ່ແມ່ ຜູ້ປົກຄອງເຂົ້າຮ່ວມ ໃນກິດຈະກຳທີ່ເປັນຮູບປະທຳ ເພື່ອປັບປຸງສິ່ງອຳນວຍ ຄວາມສະ ດວກດ້ານສຸຂະອະນາໄມທີ່ໂຮງຮຽນ ເຊັ່ນ: ການກໍ່ສ້າງວົດຖ່າຍ.
8. ດຳເນີນບາດກ້າວແຕ່ເນີ້ນໆ ເພື່ອເຮັດໃຫ້ໂຮງຮຽນທີ່ມີສະພາບແວດລ້ອມທີ່ເປັນເພື່ອນມິດ ໂດຍການດັດແປງຂອງເກົ່າມາໃຊ້ໃໝ່, ຕິດຕັ້ງຖັງເຮັດປຸ໋ຍໝັກ, ຈັດສວນຄົວ, ປູກຕົ້ນໄມ້ ແລະ ຕ້ອງໃຫ້ ແນ່ໃຈວ່າ ມັນບໍ່ເຮັດໃຫ້ເກີດມີນ້ຳເສຍ.
9. ຈັດສິ່ງອຳນວຍຄວາມສະດວກສຳລັບລ້າງມືດ້ວຍສະບູ ຫຼື ຂີ້ເຖົ່າໃກ້ກັບວົດຖ່າຍ. ຕ້ອງແນ່ໃຈ ວ່າມັນ ຖືກນຳໃຊ້ ແລະ ຖືກປະຕິບັດຕະຫຼອດໄປ!

ຈາກ: Exploring Ideas. UNICEF Web site: Teachers Talking About Learning. www.unicef.org/teachers

ຄູ່ມືເຫຼັ້ມທີ 4

ການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ ໃນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້



ກະຊວງສຶກສາທິການ

ສູນການສຶກສາຮຽນຮ່ວມ

ສະໜັບສະໜູນໂດຍ ອົງການອຸຍແນດສະໂກ

ນະຄອນຫຼວງວຽງຈັນ, ສປປ ລາວ

2011

ຄຳນຳ

ຊຸດຄູ່ມືແນະນຳການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດຕໍ່ການຮຽນຮູ້ໄດ້ສ້າງຂຶ້ນໂດຍອົງການອຸຍແນສໂກປະຈຳພາກພື້ນອາຊີ-ປາຊີຟິກພ້ອມທັງພິມແຈກຢາຍຢ່າງ ກ້ວາງຂວາງໃນທົ່ວພາກພື້ນ. ຄູ່ມືດັ່ງກ່າວມີທັງໝົດ 4 ເຫຼັ້ມຄື: ຄູ່ມືແນະນຳການສ້າງສະພາບແວດລ້ອມ, ຄູ່ມືແນະນຳການຈັດການສອນຫ້ອງຮຽນຮ່ວມ, ຄູ່ມືແນະນຳການສົ່ງເສີມສຸຂະພາບ , ຄູ່ມືແນະນຳການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ ໃນຫ້ອງຮຽນຮ່ວມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ສຳລັບຄູ່ມືແນະນຳເຫຼັ້ມນີ້ເປັນຄູ່ມືແນະນຳເຫຼັ້ມທີ 4: ເນື້ອໃນເວົ້າເຖິງການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້. ຈຸດປະສົງຫຼັກ ຂອງຄູ່ມືແນະນຳເຫຼັ້ມນີ້ ແມ່ນເພື່ອເຂົ້າໃຈກ່ຽວກັບຄວາມໝາຍຂອງການລົງໂທດ ແລະ ການປະຕິບັດວິໄນແບບສ້າງສັນ/ການສຶກສາອົບຮົມແບບສ້າງສັນ, ສະນັ້ນ, ເພື່ອເສີມສ້າງຄວາມ ສາມາດໃຫ້ແກ່ຜູ້ຊົມ ໃຊ້ ກ່ຽວກັບການແກ້ໄຂບັນຫາຄວາມແຕກຕ່າງຫຼາກຫຼາຍຂອງເດັກ, ຄູ່ມືແນະນຳເຫຼັ້ມນີ້ໄດ້ແນະນຳແນວທາງ, ວິທີການແກ້ໄຂຄວາມຮຸນແຮງ, ການດຳເນີນການແກ້ໄຂນັກຮຽນຝ່າຝືນລະບຽບ, ການສ້າງສະພາບແວດລ້ອມ, ການສ້າງສາຍພົວພັນລະຫວ່າງ ຄູ-ນັກຮຽນເພື່ອສ້າງໂຮງຮຽນ ແລະ ຫ້ອງຮຽນໃຫ້ກາຍເປັນການສຶກສາຮຽນຮ່ວມ ແລະ ເປັນມິດຫຼາຍຂຶ້ນ, ຊຶ່ງເປັນປະໂຫຍດສູງ ສຳລັບຜູ້ສ້າງນະໂຍບາຍ, ຜູ້ຈັດຕັ້ງປະຕິບັດ ແລະ ຊຸມຊົນ.

ເພື່ອສຳເລັດເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫະສະວັດ ເພື່ອການພັດທະນາໃນປີ2015. ອົງການອຸຍແນສໂກໄດ້ແນະນຳ ໃຫ້ແຕ່ລະປະເທດສະມາຊິກດຳເນີນ ການ ແປເປັນ ພາສາຂອງຕົນເອງ ແລະ ດັດປັບໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະປະເທດ. ສຳລັບ ສປປ ລາວ, ອະດີດກົມສາມັນສຶກສາໄດ້ຮັບການສະໜັບສະໜູນ ໃນການແປຈາກສະບັບຕົ້ນທີ່ເປັນພາສາອັງກິດມາເປັນສະບັບພາສາລາວ. ຈາກນັ້ນ, ໃນປີ 2010 ໂດຍການສືບຕໍ່ສະ ໜັບສະໜູນຈາກອົງການ UNESCO, ສູນການສຶກສາຮຽນຮ່ວມໄດ້ຮ່ວມກັບກົມສ້າງຄູ, ກົມປະຖົມ ແລະ ອະນຸບານ ແລະ ສະຖາບັນສ້າງຄູ 8 ແຫ່ງ ຈັດກອງປະຊຸມວິຊາການຮຽບຮຽງ, ປັບປຸງ ແລະ ຮີບໂຮມອີກຄັ້ງໜຶ່ງ. ການປັບປຸງ ແລະ ຮີບໂຮມຄັ້ງນີ້ບໍ່ໄດ້ປ່ຽນແປງເນື້ອໃນແຕ່ປະການໃດ ພຽງແຕ່ນຳໃຊ້ຄຳສັບ ແລະ ສຳນວນເປັນ ພາສາລາວ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ຕົວຢ່າງ ຈຳນວນໜຶ່ງຖືກຄັດອອກ ເພື່ອໃຫ້ມີລັກສະນະກະທັດລັດແກ່ຜູ້ຊົມໃຊ້.

ສູນການສຶກສາຮຽນຮ່ວມ ສະແດງຄວາມຂອບໃຈເປັນຢ່າງສູງມາຍັງທີມງານ ວິຊາການ ຈາກກະຊວງສຶກສາທິການ ແລະ ສະຖາບັນສ້າງຄູທັງ 8 ແຫ່ງທີ່ໄດ້ໃຫ້ການຮ່ວມມືໃນການຮຽບຮຽງຄູ່ມືດັ່ງກ່າວ. ພິເສດຂໍຂອບໃຈມາຍັງ ອົງການອຸຍແນສໂກ ທີ່ໃຫ້ການສະໜັບສະໜູນດ້ານງົບປະມານນັບທັງການ ຮຽບຮຽງ ແລະ ຄ່າພິມແຈກຢາຍອີກດ້ວຍ. ເປັນທີ່ແນ່ນອນວ່າການປັບປຸງ, ຮິບໂຮມຄັ້ງນີ້ຈະບໍ່ປາສະຈາກໄດ້ຂໍ້ຂາດຕົກບົກຜ່ອງ. ສູນການສຶກສາຮຽນຮ່ວມມີຄວາມຍິນດີຮັບເອົາຄຳຕຳນິຕິຊົມທຸກປະການຈາກຜູ້ອ່ານ ແລະ ຜູ້ຊົມໃຊ້ ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນໃນອະນາຄົດ
.

ຜູ້ອຳນວຍການສູນການສຶກສາຮຽນຮ່ວມ

ສາລະບານ **ໜ້າ**

ພາກສະເໜີ 03

ບົດທີ 1. ຄວາມເຂົ້າໃຈກ່ຽວກັບການລົງໂທດ ແລະ ການປະຕິບັດລະບຽບວິໄນ ..05

1. **ຄວາມໝາຍຂອງການລົງໂທດ** 07

1.1 ການລົງໂທດດ້ານວາຈາ ແລະການຮັບມືກັບຄວາມຢາກຮ້າຍ.....07

1.2 ການລົງໂທດດ້ານຮ່າງກາຍ 09

2. **ຄວາມໝາຍຂອງການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນ**.....13

2.1 ການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນໃນຫ້ອງ.....15

2.2 ບາດກ້າວການປະຕິບັດລະບຽບວິໄນ/ສຶກສາອົບຮົມແບບສ້າງສັນ.....18

2.3 ການຫຼີກລ້ຽງຄວາມສັບສົນໃນການປະຕິບັດລະບຽບວິໄນ 20

ບົດທີ 2. ການສ້າງສາຍພົວພັນທີ່ດີລະຫວ່າງຄູ - ນັກຮຽນ 22

1. **ພື້ນຖານຂອງການພົວພັນທີ່ດີລະຫວ່າງຄູ - ນັກຮຽນ** 22

2. **ເປັນຫຍັງເດັກຈຶ່ງມີພຶດຕິກຳສະແດງອອກໃຫ້ເຫັນຄືແນວນັ້ນ?** 22

2.1 ການສ້າງທາງເລືອກ 22

2.2 ຄວາມຕ້ອງການຢາກເປັນເຈົ້າຂອງ 23

3. **ເປັນຫຍັງເດັກຈຶ່ງປະພຶດຜິດ ?** 24

3.1 ການຊອກຫາຄວາມສົນໃຈ 25

3.2 ຫຼັກການທົ່ວໄປເພື່ອຮັບມືກັບນັກຮຽນທີ່ຮຽກຮ້ອງຄວາມສົນໃຈຂອງນັກຮຽນ....26

ກ. ອຳນາດ 26

ຂ. ການແກ້ແຄ້ນ 26

ຄ. ການຫຼີກລ້ຽງຄວາມຫຼົ້ມເຫຼວ ຫຼື ຄວາມຂາດເຂີນ (ປົມດ້ອຍ) 27

4. **ການຮຽນຮູ້ກ່ຽວກັບນັກຮຽນຂອງທ່ານ**.....28

5. **ເຂົ້າໃຈສະພາບຄວາມເປັນຈິງ(ບໍລິບົດ)ການດຳລົງຊີວິດຂອງນັກຮຽນ**.....30

5.1 ເດັກນັກຮຽນ 32

5.2 ຄອບຄົວ ແລະ ຊຸມຊົນ 34

6. **ການຮຽນຮູ້ກ່ຽວກັບຄອບຄົວນັກຮຽນ** 38

7. **ການສື່ສານ/ພົວພັນລະຫວ່າງພໍ່ແມ່ ຜູ້ປົກຄອງ - ຄູສອນ**.....42

8. **ຍຸດທະສາດຂອງການຊຸກຍູ້ສົ່ງເສີມ** 43

ບົດທີ 3. ການສ້າງສະພາບແວດລ້ອມທີ່ດີ ແລະ ການສະໜັບສະໜູນການຮຽນຮູ້.45

1. **ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້** 45

2. **ການເຮັດໃຫ້ສະພາບແວດລ້ອມຂອງການຮຽນຮູ້ ມີຄວາມສະດວກສະບາຍ** ...46

3. ການສ້າງກິດຈະວັດປະຈຳວັນໃນຫ້ອງຮຽນ 49
4. ການສ້າງລະບຽບຫ້ອງຮຽນຮ່ວມກັບນັກຮຽນ ແລະ ຜູ້ປົກຄອງ 50
5. ມາດຕະຖານສຳລັບການປະພຶດ ແລະ ການຄຸ້ມຄອງທີ່ດີ 53
6. ການໃຫ້ການສະໜັບສະໜູນແບບທາງບວກ 59
ບົດທີ 4 : ການກຽມພ້ອມແກ້ບັນຫາກັບຄວາມແຕກຕ່າງຫລາກຫລາຍຂອງເດັກ ໃນຫ້ອງຮຽນ.....62
4.1 ການໃຫ້ຄ່ານິຍົມ ແລະ ການຊຸກຍູ້ສິ່ງເສີມດ້ວຍຫລາຍວິທີ.....62
4.2 ການຮວບຮວມເອົາວິທີຄົ້ນຄິດ,ວິທີຮຽນຮູ້ ແບບແຕກຕ່າງກັນເຂົ້ານຳໃຊ້ໃນຫ້ອງຮຽນ.64
4.3 ສິ່ງທ້າທາຍຕໍ່ກັບຄວາມແຕກຕ່າງຫລາກຫລາຍ.....66
ບົດທີ 5: ການແກ້ໄຂບັນຫາຄວາມຮຸນແຮງ ແລະ ການຫັນນະໂຍບາຍສູ່ພາກ ປະຕິບັດ.....75
1 . ຮູບແບບຂອງຄວາມຮຸນແຮງທີ່ເປັນພື້ນຖານ..... ..75
ກ. ຮູບແບບຄວາມຮຸນແຮງ 75
ຂ. ສາເຫດຂອງຄວາມຮຸນແຮງ..... 76
ຄ. ການສ້າງແຜນທີ່ຂອງຄວາມຮຸນແຮງ..... 77
2 . ສັນຍານເຕືອນສຳລັບເດັກທີ່ຖືກທາລຸນ 79
3 . ສັນຍານເຕືອນສຳລັບເດັກທີ່ມີຄວາມສ່ຽງ 81
4. ແນວທາງເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ 82
ບົດທີ 6. ການດຳເນີນການແກ້ໄຂກັບນັກຮຽນຝ່າຝືນລະບຽບວິໄນ 84
1. ການປັບປຸງຄວາມມີປະສິດທິຜົນຂອງເຕັກນິກການໃສ່ລະບຽບວິໄນແບບສ້າງ.....84
2. ຂໍ້ແນະນຳກ່ຽວກັບການປະຕິບັດລະບຽບວິໄນ/ການສຶກສອົບຮົມແບບສ້າງສັນ.....84
3. ຂໍ້ແນະນຳພິເສດກ່ຽວກັບການສິດສອນໃນຫ້ອງຮຽນແບບສ້າງສັນ.....88
4. ການນຳໃຊ້ຜົນໄດ້ຮັບທີ່ຕາມມາທີ່ເໝາະສົມ ທັງທີ່ເປັນທາງບວກ ແລະທາງລົບ..90
5. ຄວາມຮອບຄອບໃນການຢັບຢັ້ງນັກຮຽນ “Time out”.....92
6. ການແກ້ໄຂຂໍ້ຂັດແຍ່ງ 93
7. ເຕັກນິກການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນຕາມໄວອາຍຸ 95
8. ການຊ່ອຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ.....98
ກ. ວິທີງ່າຍໆເພື່ອຊ່ອຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ 101
ຂ. ການຄຸ້ມຄອງຫ້ອງຮຽນ ແລະດັດແກ້ການສິດສອນ 102

ພາກສະເໜີ

ເດັກທີ່ເກີດມາໃນໂລກນີ້ ຖ້າບໍ່ໄດ້ຮັບການຊ່ອຍເຫຼືອ ຈະບໍ່ສາມາດພັດທະນາຢ່າງເຕັມ ສ່ວນໄດ້.ໃນຖານະເປັນຄູສອນ, ວຽກງານຂອງເຮົາແມ່ນອົບຮົມເຂົາເຈົ້າ ແລະ ສອນເຂົາເຈົ້າ ໃຫ້ຮູ້ ຈັກວິທີການດຳລົງຊີວິດ. ແຕ່ສິ່ງນີ້ບໍ່ແມ່ນວຽກງານທີ່ງ່າຍດາຍ. ໃນບາງມື້, ຫ້ອງຮຽນຈະເປັນບ່ອນ ທີ່ມີຄວາມຕື່ນເຕັ້ນ, ສະໜຸກສະໜານ ແລະ ມ່ວນຊື່ນໃນການຮ່ຳຮຽນ ສຳລັບນັກຮຽນ. ແຕ່ອີກ ບາງມື້, ພວກເຮົາອາດຈະຮູ້ສຶກກົດດັນ ແລະ ບໍ່ມີຄວາມໝັ້ນ ໃຈໃນຄວາມສາມາດຂອງຕົນເພື່ອ ເຮັດວຽກງານ. ການເປັນຄູນັ້ນ ຍາກ ທີ່ຈະບອກວ່າບໍ່ຄ່ອຍສະໜຸກສະໜານ ຫຼື ເປັນວຽກໜ້າເບື່ອ; ແຕ່ໃນຂະນະດຽວກັນ ເປັນກໍຍັງເປັນ ວຽກທີ່ສຳຄັນທີ່ສຸດທີ່ພວກເຮົາຈະເຮັດ.

ພວກເຮົາຮູ້ວ່າການສິດສອນມັນຍາກແນວໃດ ແລະ ຍັງຕ້ອງເອົາໃຈໃສ ່ຮັບຜິດ ຊອບ ຕໍ່ນັກຮຽນ ແຕ່ແລ້ວນັກຮຽນ ກໍບໍ່ຟັງຄວາມ. ມັນບໍ່ເໝືອນກັບການເປັນພໍ່ແມ່, ທ່ານຕ້ອງຮັບຜິດ ຊອບເດັກຫຼາຍຄົນໃນເວລາດຽວກັນ, ບໍ່ແມ່ນສອງສາມຄົນ ແລະ ແຕ່ລະຄົນຈະມີນິໄສຈຸດພິເສດ ໄປຄົນລະຢ່າງ. ເຂົາຍັງບໍ່ຄ່ອຍຈະປະພຶດຕາມທີ່ທ່ານຕ້ອງການນຳອີກ. ເບິ່ງແລ້ວຄ້າຍກັບວ່າສິ່ງ ທີ່ທ່ານວາງແຜນປະຕິບັດ ກັບລຸ້ນໜຶ່ງພວມໄປໄດ້ດີ, ແຕ່ເມື່ອເຂົາຈາກໄປມີໜ້າໃໝ່ເຂົ້າມາ ທ່ານກໍຈະພົບກັບຄວາມສະໜຸກສະໜານ ແລະ ສິ່ງທ້າທາຍແບບໃໝ່ເຂົ້າມາແທນ. ຄູສອນທຸກຄົນ ຕ້ອງການສິ່ງທີ່ດີທີ່ສຸດສຳລັບນັກຮຽນແລະ ຕ້ອງສ້າງຄວາມໝັ້ນ ໃຈໃນຄວາມອາດ ສາມາດ ຂອງເຂົາເຈົ້າແລະຍົກສູງຄວາມພາກພູມໃຈໃນຕົນເອງຂອງເຂົາ. ແຕ່ວ່າເມື່ອເວລານັກຮຽນຂອງ ທ່ານບໍ່ຟັງຄວາມ, ປະຕິເສດທີ່ຈະເຮັດສິ່ງທີ່ທ່ານບອກ ຫຼື ບໍ່ສົນໃຈທ່ານ, ມັນກໍ່ ຈະກາຍມາເປັນ ສິ່ງລຳຄານ ແລະ ໝົດທາງແກ້ໄຂ. ຄື່ອງມືສຳລັບການປະຕິບັດວິໄນທາງສ້າງສັນທີ່ສະເໜີໃນ ເອກະສານນີ້ເປັນທາງເລືອກທີ່ເປັນຮູບປະທຳເພື່ອທົດແທນການລົງໂທດ ເຊັ່ນ ຕີດ້ວຍຝາມື, ຍີກດ້ວຍນິ້ວມື, ນາບຂູ່, ຮ້ອງຂໍ, ໃຫ້ລາງວັນເປັນສິນບົນ, ຮ້ອງດ່າ, ສັ່ງການ, ເອີ້ນຊື່, ບັງຄັບ ໃຫ້ອອກ ແຮງງານ ແລະ ວິທີການອື່ນໆ ທີ່ເປັນການະທຳແບບລົບໜູ່ຫຼາຍກວ່ານີ້.

“ ຫ້ອງຮຽນຮຽນຮ່ວມ - ເປັນເພື່ອນມິດໃນການຮຽນຮູ້ ” ແມ່ນຫຍັງ ?

ເມື່ອເວລາພວກເຮົາຍ່າງເຂົ້າໄປໃນຫ້ອງຮຽນ ເຮົາຈະເຫັນໜ້າຂອງນັກຮຽນ ທີ່ຕ້ອງສິດ ສອນ. ແຕ່ພວກເຮົາຈຳເປັນຕ້ອງຈື່ຈຳໄວ້ວ່ານັກຮຽນ ເຫຼົ່ານີ້ອາດຍັງບໍ່ແມ່ນເດັກທັງໝົດທີ່ມາເຂົ້າ ຮຽນຢູ່ ໃນຫ້ອງ ຮຽນ. ອາດຍັງມີເດັກຜູ້ອື່ນໆອີກ ທີ່ບໍ່ສາມາດມາເຂົ້າໂຮງຮຽນໄດ້. ນອກຈາກນີ້, ຜູ້ທີ່ມີໜ້າຢູ່ໃນຫ້ອງ ຮຽນ, ອາດຈະບໍ່ຮູ້ສຶກວ່າ ເຂົາມີຄວາມເປັນເຈົ້າຂອງທີ່ນັ້ນ ແລະ ອາດບໍ່ໄດ້ “ມີສ່ວນຮ່ວມ” ໃນຫ້ອງຮຽນ ຫຼື ອາດຈະປະພຶດໃນທາງທີ່ຜິດໆ.

ຫ້ອງຮຽນຮຽນຮ່ວມ - ເປັນເພື່ອນມິດໃນການຮຽນຮູ້ (ILFC) ຍິນດີຕ້ອນຮັບດູແລ ແລະ ສຶກສາ ອົບຮົມເດັກທຸກຄົນ ໂດຍບໍ່ຄຳນຶງເຖິງຄວາມແຕກຕ່າງທາງເພດ, ຮ່າງກາຍ, ສະຕິປັນຍາ, ສັງຄົມ, ອາລົມ ຈິດ, ພາສາ ຫຼື ຄຸນລັກສະນະອື່ນໆ. ເຂົາອາດເປັນເດັກທີ່ມີພອນສະຫວັນ ຫຼື ຂາດສະມັດຖະພາບດ້ານ ຮ່າງກາຍ ຫຼື ດ້ານການຮຽນຮູ້. ພວກເຂົາອາດເປັນເດັກຂ້າງຖະໜົນ ຫຼື

ເດັກອອກແຮງງານ, ເດັກເຂດຫ່າງໄກສອກຫຼີກ ຫຼື ເດັກເລ່ລ່ອນພະເນຈອນ, ເດັກຈາກກຸ່ມພາສາ -ຊົນເຜົ່າ-ວັດທະນະທຳ ຕ່າງກັນ, ເດັກທີ່ໄດ້ຮັບຜົນສະທ້ອນຈາກເອັດໄອວີ/ເອດສ໌ (HIV/AIDS), ເດັກມາຈາກຊົງເຂດ ຫຼື ກຸ່ມຄົນດ້ອຍໂອກາດ. ດັ່ງນັ້ນILFCຈຶ່ງເປັນໜຶ່ງສິ່ງ ທີ່ຄູສອນເຂົ້າ ໃຈເຖິງ ຄຸນຄ່າຂອງຄວາມຫຼາກຫຼາຍຢູ່ໃນຫ້ອງຮຽນ ແລະ ປະຕິບັດບາດກ້າວຕ່າງໆເພື່ອຮັບປະກັນໃຫ້ ເດັກຍິງ ແລະ ເດັກຊາຍທຸກຄົນໄດ້ເຂົ້າມາຮຽນ ໃນໂຮງຮຽນ

ການນຳເອົາເດັກທຸກຄົນເຂົ້າມາຮຽນ ຢູ່ໃນຫ້ອງຮຽນຂອງພວກເຮົາ ເປັນພຽງເຄິ່ງໜຶ່ງຂອງ ຄວາມທ້າທາຍເທົ່ານັ້ນ. ແຕ່ອີກເຄິ່ງໜຶ່ງ ແມ່ນການຕອບສະໜອງຄວາມຕ້ອງການດ້ານການຮຽນ ຮູ້ ແລະ ພຶດຕິກຳທີ່ແຕກຕ່າງກັນຂອງພວກເຂົາ ເພື່ອວ່າເຂົາຈະຢາກສືບຕໍ່ຮຽນຢູ່ໃນຫ້ອງຮຽນ ຂອງພວກເຮົາ. ທຸກໆຫ້ອງຮຽນຈະມີຄວາມແຕກຕ່າງ ຫຼາກຫຼາຍໃນແງ່ຂອງເດັກ ທີ່ເຮົາສອນມີ ຫຼາຍປະເພດ ແລະ ໃນແງ່ວິທີການໃນການຮຽນຮູ້ແບບຕ່າງໆຂອງເຂົາ. ພວກເຮົາຈຳເປັນຕ້ອງພິ ຈາລະນາສິ່ງທີ່ເດັກແຕ່ລະຄົນ ຕ້ອງ ການຢາກຮຽນ, ວິທີໃດທີ່ເຂົາສາມາດຮຽນໄດ້ດີທີ່ສຸດ ແລະ ຈະເຮັດແນວໃດເຊິ່ງພວກເຮົາໃນຖານະເປັນຄູ ຈຶ່ງຈະສາມາດ ສ້າງການພົວພັນທີ່ດີກັບເດັກແຕ່ ລະຄົນ ເພື່ອໃຫ້ເຂົາຢາກຮຽນຮູ້ຢ່າງຫ້າວຫັນຈາກ ພວກເຮົາ. ອີກສິ່ງໜຶ່ງທີ່ມີຄວາມສຳຄັນພໍໆກັນ ກໍຄື ພວກເຮົາຈຳເປັນຕ້ອງຄົ້ນໃຫ້ເຫັນວິທີທີ່ຈະເຮັດໃຫ້ ເດັກທຸກຄົນຢາກຮ່ຳຮຽນ*ດ້ວຍກັນ.*

ບົດທີ 1
ຄວາມເຂົ້າໃຈກ່ຽວກັບການລົງໂທດ ແລະ ການປະຕິບັດລະບຽບວິໄນ

ຜ່ານມາເດັກຈຳນວນໜຶ່ງມັກຄວາມຟຸມເຟືອຍ, ເຂົາເຈົ້າມີນິໄສຍາດອັນບໍ່ດີ, ດູໝິ່ນສິດ ອຳນາດ, ສະແດງອອກເຖິງຄວາມບໍ່ນັບຖືຜູ້ອາວຸດໂສ, ມັກເວົ້າລົມກັນແນວ ບໍ່ເປັນປະໂຫຍດເຂົ້າ ມາແທນ ເລື່ອງການເຮັດກິດຈະກຳຕ່າງໆ. ເດັກເປັນຜູ້ນຳບຊູ່ ບໍ່ແມ່ນເປັນຜູ້ຊ່ອຍເຫຼືອຄອບຄົວ, ຈະບໍ່ລຸກຂຶ້ນຢືນເຄົາລົບ ໃນເວລາຜູ້ອາວຸໂສຍ່າງເຂົ້າມາໃນຫ້ອງຮຽນ, ມີຄວາມຂັດແຍ່ງກັບ ຜູ້ປົກ ຄອງ, ມັກລົມກັນໃນຫ້ອງ, ກິນຂອງກິນຢູ່ຕາມໂຕະ, ນັ່ງເອົາຂາຂຶ້ນຫ້າງ ແລະ ນາບຊູ່ຄູຂອງເຂົາ. ຄຳຖະແຫລງນີ້ແມ່ນຂຽນ ຂຶ້ນໂດຍໂຊແຄຣດ (Socrates), ນັກປັດຊະຍາກະເລັກ ຜູ້ທີ່ມີຊີວິດຢູ່ ຊ່ວງປີ 469-399 ກ່ອນຄຣິດ ສັກກະລາດ.

ກໍລະນີສຶກສາ: ກໍລະນີຂອງທ້າວ ເຣມອນ (Ramon)

-“ຂ້ອຍຈະບໍ່ໄປໃກ້ຫ້ອງຮຽນຂອງຊາຍຄົນນັ້ນ! ຂ້ອຍບໍ່ຈຳເປັນຕ້ອງເຮັດສິ່ງທີ່ທ່ານເວົ້າ “

-”ຂ້ອຍບໍ່ເຄີຍນຶກເລີຍວ່າ ຂ້ອຍຈະໄດ້ຮຽນຢູ່ໃນຫ້ອງນີ້; ແມ່ຂ້ອຍເວົ້າວ່າຂ້ອຍຈະຕ້ອງຢູ່ ໃນໂຮງ ຮຽນທີ່ມີການສຶກສາພິເສດ. ຄົນເວົ້າວ່າຂ້ອຍເປັນຜູ້ພິການໃນການດ້ານການຮຽນຮູ້ ແລະ ມີຄວາມ ຫ້າວຫັນຜິດປົກກະຕິ ແລະ ຂາດສະມາທິ (ADHD - Attention Deficit Hyperactivity Disorder).

ເຣມອນແລ່ນລົງໄປຕາມທາງຂອບຫ້ອງປະຊຸມ ແລ້ວເອົາຕຳເດັກຜູ້ອື່ນໆ ແລະ ຄູສອນ, ລາວຍ່າງເຂົ້າໄປໃນຫ້ອງຮຽນໃນຕອນເຊົ້າ ພ້ອມທັງປະກາດກ້າວສິ່ງທີ່ລາວຈະບໍ່ເຮັດ, ຮ້ອງໂຮ ຫຼື ແລ່ນໄປອ້ອມຫ້ອງຮຽນໃນເວລາທີ່ລາວຮູ້ສຶກວ່າຄັກ. ລາວເອີ້ນສະມາຊິກເພື່ອນຮ່ວມຫ້ອງວ່າເປັນ “ກຸ່ມຄົນ ໄບ້” ແລະ ດ່າວ່າຕໍ່ພວກທີ່ຮຽນຫ້ອງປີທີ 6 ເປັນຜູ້ທຳຜິດກົດໝາຍ ເຊິ່ງຂ້ອຍບໍ່ເຄີຍຮູ້ບໍ່ ເຄີຍເຫັນຈົນວ່າ ຂ້ອຍໄດ້ຢູ່ ປີທີສາມຂອງໂຮງຮຽນ ມັດທະຍົມ.
ນີ້ເປັນນັກຮຽນໃນຫ້ອງຮຽນຂອງຂ້ອຍ,”ເຣມອນ”. ຂ້ອຍຮູ້ສຶກຢາກຮ້າຍກ່ຽວກັບພຶດຕິກຳຂອງລາວ. ມັນເຮັດໃຫ້ຂ້ອຍກຽດຊັງລາວ, ແຕ່ເໜືອສິ່ງອື່ນໃດແມ່ນຂ້ອຍໝົດຫວັງກັບລາວ, ຂ້ອຍຂາດຄວາມ ສາມາດ, ແລະ ລະບົບ...ຂ້ອຍໜີຈາກໂຮງຮຽນໃນມື້ນັ້ນດ້ວຍນ້ຳຕາ, ເຈັບແສບບຮອດກະເພາະ ຍ້ອນເດັກຄົນນີ້.

ທ່ານຈະເຮັດແນວໃດ?

ໃນກໍລະນີຂອງທ້າວ ເຣມອນ ຄຶດວ່າເປັນສິ່ງທີ່ເກີນຂອບເຂດ, ມັນບໍ່ແມ່ນສິ່ງທຳມະດາ. ຄວາມຈິງແລ້ວພວກເຮົາທຸກຄົນ ກໍເຄີຍມີປະສົບການກັບນັກຮຽນ ທີ່ທ້າທາຍອຳນາດຂອງຄູພວກ

ເຮົາ ຫຼື ນັກຮຽນ ທີ່ລົບກວນຫ້ອງຮຽນ ແລະ ສ້າງຄວາມຜິດຫວັງ ຫຍຸ້ງຍາກໃຫ້ແກ່ນັກຮຽນຄົນອື່ນ ຫຼາຍໆທາງ. ທ້າວເຣມອນຈຳເປັນຕ້ອງເຂົ້າຢູ່ໃນການປະຕິບັດວິໄນ ຢ່າງເຕັມທີ່, ແຕ່ວ່າມີວິທີທາງ ອັນໃດແດ່?.

ກິດຈະກຳຄົ້ນຄິດຢ້ອນກັບຄືນ: ທ່ານເຄີຍຖືກປະຕິບັດວິໄນແນວໃດແດ່?

ໃຫ້ທ່ານຫວນຄິດຄືນຫຼັງໃນຕອນທີ່ທ່ານເຄີຍເປັນນັກຮຽນຢູ່ໃນໂຮງຮຽນປະຖົມ. ຖ້າຫາກ ທ່ານຫຼືເພື່ອນຮ່ວມຫ້ອງຜູ້ໃດຜູ້ໜຶ່ງໄດ້ປະພຶດແນວບໍ່ດີຄືກັບທ້າວເຣມອນ, ຄູຂອງທ່ານ ໄດ້ໃຊ້ການ ປະຕິບັດວິໄນດ້ວຍວິທີໃດແດ່?ໃຫ້ ທ່ານ ຂຽນວິທີການເຫຼົ່ານີ້ລົງໃນຕາຕະລາງຂ້າງລຸ່ມນີ້. ແລ້ວໃຫ້ ຂຽນສິ່ງທີ່ ທ່ານ ຮູ້ສຶກກ່ຽວກັບວິທີການປະຕິບັດວິໄນ ດັ່ງກ່າວ ກໍຄືຄວາມມີປະສິດທິຜົນ ຫຼື ບໍ່ມີປະສິດທິຜົນໃນໄລຍະຍາວຕາມທີ່ທ່ານຄິດ. ທ່ານຄິດວ່າເດັກໄດ້ມີຄວາມຮູ້ສຶກແນວໃດ? ທ່ານ ໄດ້ເຫັນ ຫຼື ໄດ້ມີປະສົບການການ ປ່ຽນແປງແບບຍາວນານໃນການປະພຶດ / ພຶດຕິກຳບໍ່?.

ຈາກນັ້ນ, ໃຫ້ທ່ານຖາມຕົວເອງ," ຖ້າຂ້ອຍມີນັກຮຽນ ຄື ກັບທ້າວເຣມອນ, ຂ້ອຍຈະເຮັດຄື ແນວໃດ ແລະ ຍ້ອນຫຍັງຈຶ່ງເຮັດແນວນັ້ນ? "ທ່ານ ຄິດວ່າມັນຈະມີປະສິດ ທິຜົນໃນການ ຍຸດຕິພຶດ ຕິກຳທີ່ບໍ່ຖືກຕ້ອງໃນອະນາຄົດໄດ້ບໍ? ໃຫ້ຂຽນແນວຄວາມຄິດຂອງ ທ່ານ ລົງດ້ວຍ. ວິທີການຂອງ ທ່ານ ຄ້າຍຄືກັບວິທີການ ຂອງຄູທ່ານທີ່ໃຊ້ບໍ່?.

	ວິທີປະຕິ ບັດວິໄນ	ເປັນຫຍັງຈຶ່ງໃຊ້ ວິທີການນີ້	ວິທີການທີ່ໃຊ້ໄດ້ຮັບຜົນສະເໝີບໍ່, ໂດຍສະເພາະໃນໄລຍະຍາວ? ເດັກນັກຮຽນໄດ້ມີຄວາມຮູ້ສຶກແນວໃດ?
ການກະທຳຂອງຄູສອນ ທ່ານ			
ການກະທຳຂອງທ່ານ			

ໃນຫຼາຍໆປະເທດ ແລະ ໃນຫ້ອງຮຽນ, ເຣມອນ ອາດຈະຖືກລົງໂທດດ້ານຮ່າງກາຍ ຍ້ອນພຶດ ຕິກຳຂອງລາວ ເຊິ່ງສ່ວນໃຫຍ່ອາດຈະເປັນການຕີດ້ວຍໄມ້ແສ້ ຫຼື ດ້ວຍວັດຖຸອື່ນໆ. ຄູຂອງ ທ່ານ ເຄີຍ ໄດ້ໃຊ້ວິທີໃດ? ສຳລັບທ່ານເອງເດ ທ່ານ ຄິດວ່າຈະໃຊ້ວິທີການແບບໃດ?

ໃນການຂຽນຕື່ມໃສ່ຕາຕະລາງຂ້າງເທິງນີ້ ມັນບໍ່ເປັນເລື່ອງແປກປະຫລາດ ຖ້າຫາກມີ ຫຼາຍທ່ານຕອບວ່າ "ລົງໂທດເດັກຍ້ອນການປະພຶດແນວບໍ່ດີ" ຫຼື "ເພື່ອຢຸດຕິການປະພຶດຜິດຂອງ

ເຂົາ” ຢູ່ໃນຊ່ອງຄໍລຳ “ເປັນຫຍັງຈຶ່ງໃຊ້ວິທີການນີ້ ?” ຄືກັນກັບຢູ່ໃນຊ່ອງຄໍລຳສຸດທ້າຍ “ວິທີການທີ່ໃຊ້ໄດ້ຜົນສະເໝີບໍ່, ໂດຍສະເພາະໃນໄລຍະຍາວ?” ຫຼາຍ ທ່ານ ຖ້າຫາກຄິດວ່າ ຍາວນານ ແລະ ຍາກ ອາດຈະຕອບ “ບໍ່” ບໍ່ໄວກໍຊ້າ, ເດັກຄົນດັ່ງກ່າວຈະກັບມາປະພຶດຜິດອີກຕາມແບບທີ່ເຄີຍເຮັດ. ຍ້ອນ ຫຍັງ? ຄຳຕອບແມ່ນ ນອນຢູ່ໃນຄວາມແຕກຕ່າງ ລະຫວ່າງ **ການລົງໂທດ** ກັບ **ການປະຕິບັດລະ ບຽບວິໄນ**.

1. ຄວາມໝາຍຂອງການລົງໂທດ

ການລົງໂທດແມ່ນການກະທຳ(ໃສ່ໂທດ)ທີ່ບັງຄັບໃຫ້ຄົນທີ່ທຳຜິດກົດລະບຽບ ຫຼື ສະແດງໃຫ້ເຫັນການກະທຳທີ່ບໍ່ເໝາະສົມ. ການລົງໂທດມີຈຸດໝາຍເພື່ອຄວບຄຸມ ການປະພຶດໂດຍຜ່ານເຄື່ອງມືໃນ ທາງລົບ. ການລົງໂທດມີຢູ່ສອງປະເພດທີ່ໃຊ້ກັບນັກຮຽນ ຄື:

1. ການລົງໂທດທີ່ກ່ຽວພັນກັບການດ່າຮ້າຍ ແລະ ຄວາມບໍ່ພໍໃຈທາງວາຈາທີ່ເປັນທາງລົບ. ການລົງ ໂທດປະເພດນີ້ ເປັນທີ່ຮູ້ກັນດີວ່າ ເປັນ **ການປະຕິບັດວິໄນໃນທາງລົບ**.
2. ການລົງໂທດທີ່ກ່ຽວພັນກັບຄວາມເຈັບປວດທາງຮ່າງກາຍ ຫຼື ຈິດໃຈຢ່າງຮ້າຍແຮງ ເຊັ່ນ ການລົງ ໂທດທາງຮ່າງກາຍ.

ໜ້າເສຍດາຍ, ການລົງໂທດທັງສອງແບບນີ້ ແມ່ນແນໃສ່ເລື່ອງການປະພຶດບໍ່ຖືກຕ້ອງ ແລະ ອາດຈະຊ່ອຍໄດ້ໜ້ອຍໜຶ່ງ ຫຼືບໍ່ຊ່ອຍຫຍັງເລີຍ ເພື່ອໃຫ້ເດັກປະພຶດດີຂຶ້ນໃນອະນາຄົດ. ຍິ່ງໄປກວ່ານັ້ນ, ເດັກໄດ້ຮຽນຮູ້ວ່າຜູ້ໃຫຍ່ມີອຳນາດເໜືອກວ່າ, ການໃຊ້ກຳລັງບໍ່ວ່າຈະເປັນທາງດ້ານວາຈາ,ຮ່າງກາຍ ຫຼື ອາລົມຈິດກໍເປັນທີ່ຍອມຮັບໄດ້, ໂດຍສະເພາະຕໍ່ຄົນຜູ້ທີ່ຍັງໜຸ່ນ້ອຍ ແລະ ອ່ອນ ແອກວ່າ. ບິດຮຽນນີ້ອາດສາມາດນຳໄປສູ່ເຫດການຂອງການຂົ່ມເຫັງ ແລະ ຄວາມຮຸນແຮງ ໃນໂຮງ ຮຽນ ບ່ອນທີ່ມີນັກຮຽນໃຫຍ່ກວ່າຄອບງຳນັກຮຽນທີ່ນ້ອຍກວ່າ ແລະ ບັງຄັບຂົ່ມເຫັງເພື່ອເອົາເງິນ, ອາຫານ, ວຽກບ້ານ ແລະ ຂອງທີ່ມີຄ່າອື່ນໆ.

1.1 ການລົງໂທດດ້ານວາຈາ ແລະ ການຮັບມືກັບຄວາມຢາກຮ້າຍ

ການປະຕິບັດວິໄນດ້ານລົບເປັນຮູບແບບຂອງການລົງໂທດ ເຊິ່ງ ມີຈຸດມຸ່ງໝາຍເພື່ອຄວບຄຸມການປະພຶດຂອງນັກຮຽນ, ແຕ່ມັກຈະກ່ຽວຂ້ອງກັບຄຳສັ່ງດ້ວຍວາຈາ ຫຼື ຄຳປະກາດແບບສັ້ນໆ ເທົ່ານັ້ນ ແລະ ບໍ່ໄດ້ເຮັດໃຫ້ເກີດຜົນທັນທີທັນໃດ. ມັກມີການໃສ່ໂທດແບບເຄັ່ງຄັດ ເຊັ່ນ ຕີ ຫຼື ລົບໜູ່ຢຽບຫຍາມໃຫ້ມີຄວາມເຈັບປວດ, ບັນດາຄູສອນ ຜູ້ບໍ່ໃຊ້ການລົງໂທດທາງດ້ານຮ່າງກາຍ ອາດນຳໃຊ້ວິທີການປະຕິບັດວິໄນດ້ານລົບແທນ. ແຕ່ວ່າກໍ ຄື ກັນກັບການລົງໂທດທາງດ້ານຮ່າງ ກາຍ, ສິ່ງນີ້ກໍສາມາດເຮັດໃຫ້ນັກຮຽນ ມີຄວາມໂກດຮ້າຍ ແລະ ກ້າວລ້ຳຫຼືມີຄວາມພາກພູມໃຈ ໃນຕົນເອງຕ່ຳ.

ຍຸດທະສາດ ການປະຕິບັດວິໄນທາງລົບປະກອບມີ:

ຄຳສັ່ງ ນັ່ງລົງ, ມິດງຽບ”.“ໃຫ້ຂຽນຄຳສັບ100ເທື່ອ”“ຂ້ອຍບໍ່ຢາກເສຍເວລາມຳເລື່ອງທີ່ບໍ່ເປັນ ປະໂຫຍດນີ້”

ການໃຊ້ຖ້ອຍຄຳຫ້າມປາມ “ຢ່າເຮັດແນວນັ້ນ!/ຢ່າເຮັດອັນນັ້ນ!”

ການໃຊ້ຖ້ອຍຄຳໂກດເຄືອງ ແລະ ຮ້າຍ.“ເຈົ້າຈະຕິກຢູ່ໃນຄວາມລຳບາກຫຼາຍກວ່າທີ່ເຈົ້າຮູ້ຈັກ ມັນ.

ເຈົ້າ/ມຶງຍັງຈະຖືກກູເຮັດໃຫ້ຍາກກວ່ານີ້ຢູ່”

ການໃຊ້ຖ້ອຍຄຳຕຳນິ:“ ອັນນີ້ ເປັນສິ່ງທີ່ດີທີ່ສຸດ ທີ່ເຈົ້າສາມາດເຮັດໄດ້ແລ້ວຫວ໋າ? ເຮັດໄດ້ສ່ຳ ນີ້ຫວ່າ?

ການໃຊ້ຖ້ອຍຄຳຂົ່ມຂູ່: “ຖ້າພວກເຈົ້າບໍ່ຢຸດເຊົາລົມກັນ, ຂ້ອຍຈະສົ່ງພວກເຈົ້າໄປຫ້ອງຜູ້ອຳ ນວຍການໂຮງຮຽນ”

ການໃຊ້ຖ້ອຍຄຳແບບ ຖື ວ່າສະຕິປັນຍາຕ່ຳ: “ເວລາໃດນໍ ເຈົ້າຈະຮຽນຂຽນໃຫ້ໄດ້ດີ. ປານໃດ ນໍ ເຈົ້າຈຶ່ງຈະຂຽນໄດ້ຄືໝູ່?”

ພວກເຮົາມັກຈະໃຊ້ຍຸດທະສາດດ້ານລົບ ເຫຼົ່ານີ້ກໍ ຄືການລົງໂທດທາງດ້ານຮ່າງກາຍ ໃນເມື່ອ ເວລາ ພວກເຮົາໃຈຮ້າຍ ຫຼື ບໍ່ມີທາງອອກ. ຍັງມີວິທີການທາງບວກທີ່ຫຼາກຫຼາຍ ເພື່ອຈັດການກັບ ຄວາມໂກດຫຼືຄວາມລຳຄານນີ້. ມີຄູສອນຈຳນວນໜຶ່ງບອກນັກຮຽນ ຂອງເຂົາເຈົ້າວ່າ “ຂ້ອຍຕ້ອງ ການໃຫ້ພວກເຈົ້າມິດງຽບ ຈັກໄລຍະໜຶ່ງ, ດຽວນີ້ຂ້ອຍຢາກຮ້ອງຫຼາຍແລ້ວ”. ມີຄູສອນອີກຈຳນວນ ໜຶ່ງໃຫ້ນັກຮຽນ ສະຫງົບໂດຍການນັບຮອດ 10 ຫຼື ຍ່າງອອກຈາກຫ້ອງໄປຫຼາຍໆນາທີ. ຄູສອນ ອີກ ຈຳນວນໜຶ່ງຈະບອກ ໃຫ້ ນັກຮຽນຮູ້ຄວາມຮູ້ສຶກຂອງຕົນ ເພື່ອຊ່ວຍໃຫ້ນັກຮຽນ ເຂົ້າໃຈວ່າ ອັນໃດລົບກວນພວກເພິ່ນ ແລ້ວນັກຮຽນ ກໍຮຽນຮູ້ວ່າອັນໃດ ບໍ່ຄວນເຮັດ ແລະ ຍ້ອນຫຍັງ. ນັກຮຽນອາດເຮັດມັນຄືນອີກແຕ່ວ່າເຂົາເຈົ້າຈະມີຄວາມຮັບຜິດຊອບ ຕໍ່ຜົນທີ່ຕາມມາຈາກການກະ ທຳ ຂອງເຂົາ. ອັນໃດດີທີ່ສຸດສຳລັບທ່ານ.

ກິດຈະກຳ ເພື່ອປະຕິບັດ : “ ຢ່າ ” - ຮູ້ບໍ່ວ່າພວກເຮົາເປັນຄູມັກເຮັດສິ່ງທີ່ເປັນດ້ານລົບສ່ຳໃດ ?

ພວກເຮົາມັກຈະໃຊ້ຄຳສັ່ງ“ຢ່າ” ກັບນັກຮຽນ ເປັນຮູບແບບຂອງການປະຕິບັດວິໄນດ້ານ ລົບ: “ ຢ່າລົມກັນຢູ່ໃນຫ້ອງຮຽນ, ຢ່າແລ່ນໄປມາຢູ່ໃນຫ້ອງຮຽນ ” ພວກເຮົາອາດບໍ່ຮູ້ຈັກຕົວເອງວ່າ ພວກເຮົາໃຊ້ຄຳສັ່ງດ້ານລົບນີ້ເລື້ອຍປານໃດ, ມັນຫຼຸດອອກມາແບບທຳມະຊາດ, ແຕ່ວ່ານັກຮຽນ ພວກເຮົາຮູ້. ຖ້າທ່ານ ຕ້ອງການຢາກຮູ້ວ່າ ທ່ານ ໃຊ້ຄຳສັ່ງ“ຢ່າ”ນີ້ເລື້ອຍປານໃດ, ໃຫ້ ທ່ານ ເລືອກ ເອົານັກຮຽນຜູ້ໜຶ່ງຢູ່ໃນ ຫ້ອງຮຽນ (ຫຼືຜູ້ຊ່ວຍຄູ ຖ້າມີ) ແລ້ວເອົາກ່ອງກ້ອນຫີນນ້ອຍ ຫຼື ເປືອກຫອຍ ແລະຖືງປະລາສຕິກໃຫ້. ໃຫ້ບອກນັກຮຽນຟັງ ຫຼື ສັງເກດທ່ານຕະຫຼອດວັນ. ເວລາໃດກໍ່ໄດ້ເມື່ອ ເວລານັກຮຽນໄດ້ຍິນ ທ່ານ ໃຊ້ ຄຳສັ່ງ “ຢ່າ” ໃຫ້ນັກຮຽນ ເອົາກ້ອນຫີນ ຫຼື ເປືອກຫອຍອອກຈາກ

ກ່ອງ ແລ້ວປ່ອນໃສ່ຖົງ ປະລາສຕິກ. ຮອດທ້າຍອາທິດ, ໃຫ້ນັບເບິ່ງວ່າມີກ້ອນຫີນ ຫຼື ເປືອກຫອຍ ເທົ່າໃດຢູ່ໃນຖົງປະລາສຕິກ.

ແທນທີ່ຈະໃຊ້ຄຳສັ່ງ “ຢ່າ” ໄປຕະຫລອດ (ເຖິງແມ່ນວ່າບາງຄັ້ງມັນກໍມີຄວາມຈຳເປັນ), ໃນເວລາທີ່ເວົ້າເຖິງການປະພຶດທີ່ຕ້ອງການໃຫ້ ທ່ານ ແຕ່ງປະໂຫຍກໃນທາງບວກຄືນໃໝ່, ແທນທີ່ ຈະເວົ້າວ່າ, ຕົວຢ່າງ “ຢ່າ ແລ່ນຢູ່ໃນຫ້ອງຮຽນ” ໃຫ້ພະຍາຍາມເວົ້າ “ໃຫ້ຍ່າງຢູ່ໃນຫ້ອງຮຽນ”. ອັນນີ້ແມ່ນໄດ້ສະແດງອອກຢ່າງຈະແຈ້ງວ່າ ທ່ານ ຕ້ອງການຢາກໃຫ້ນັກຮຽນປະພຶດແນວໃດ. ບາງ ຄັ້ງທ່ານ ອາດຕ້ອງການຢາກໃຫ້ເຫດຜົນທາງດ້ານກົດລະບຽບ, ພິເສດໃນເວລາກ່າວ ມັນອອກມາ ເທື່ອທຳອິດ. ການອະທິບາຍກົດລະບຽບອາດເວົ້າ ຄື ແນວນີ້ໃຫ້ຍ່າງຢູ່ໃນຫ້ອງຮຽນ. ຖ້າຫາກພວກ ນ້ອງແລ່ນພວກນ້ອງອາດເຕະສະດຸດຕັ່ງອ ີ້ ແລ້ວພວກນ້ອງຈະບາດເຈັບ ແລະ ອາດຈະຕ້ອງໄປຫາ ນາຍ ແພດ ”.

1.2 ການລົງໂທດດ້ານຮ່າງກາຍ

ໃນການຈັດການກັບນັກຮຽນ ຄ ືກັບທ້າວເຮມອນນັ້ນ, ຄູສອນຫຼາຍຄົນອາດ ຈະເລືອກເອົາຮູບ ແບບຂອງການລົງໂທດຮຸນແຮງ, ການລົງໂທດແບບຮຸນແຮງສອງຢ່າງສາມາດເກີດ ຂຶ້ນແບບ ແຍກ ກັນ ຫຼື ເກີດຂຶ້ນພ້ອມໆກັນ ຄື ການລົງໂທດທາງດ້ານຮ່າງກາຍ ແລະ ການລົງ ໂທດທາງ ດ້ານອາ ລົມຈິດການລົງໂທດ ທັງສອງຮູບແບບນີ້ລ້ວນແຕ່ແມ່ນຮູບແບບ ຂອງການກະທຳຄວາມຮຸນແຮງຕໍ່ ເດັກຊຶ່ງເປັນການລະເມີດສິດທິຂອງເຂົາເຈົ້າໃນຖານະເປັນຄົນຜູ້ໜຶ່ງ ທີ່ຈະຕ້ອງໄດ້ນັບຖື, ໃຫ້ກຽດ, ໄດ້ຮັບການປົກປ້ອງດ້ວຍກົດໝາຍຢ່າງເທົ່າທຽມກັນ ແລະ ໄດ້ຮັບການປົກປ້ອງຈາກການກະທຳ ທີ່ຮຸນ ແຮງໃນທຸກ ຮູບແບບ.

ການລົງໂທດດ້ານຮ່າງກາຍ ແລະ ການນາບຂູ່, ຈະເກີດຂຶ້ນເມື່ອເວລາຄູສອນ, ຜູ້ປົກຄອງ ຫຼື ຜູ້ດູແລເດັກມີເຈດຕະນາຢາກເຮັດໃຫ້ເດັກເຈັບປວດ ທາງດ້ານຮ່າງກາຍ ຫຼື ສ້າງຄວາມສະດວກ, ເຊ່ິງຕາມປົກກະຕິ ແລ້ວແມ່ນເພື່ອຢຸດຕິການປະພຶດທີ່ບໍ່ດີຂອງເດັກ, ເພື່ອໃສ່ໂທດເຂົາທີ່ເຮັດຜິດ ແລະເພື່ອປ້ອງກັນການປະພຶດອັນເກົ່າບໍ່ໃຫ້ເຮັດຕື່ມອີກ. ຢູ່ໃນໂລກນີ້ ມີການຮັບຮູ້ເພີ່ມຂຶ້ນຫຼາຍວ່າ ການລົງໂທດທາງດ້ານຮ່າງກາຍ ເປັນສິ່ງຜິດກົດໝາຍ ແລະ ມັນບໍ່ແມ່ນ ສິ່ງທີ່ພາໃຫ້ມີການ “ຮ່ຳຮຽນ”ດີຂຶ້ນຕື່ມ. ການກະທຳ ທີ່ເປັນການລົງໂທດທາງດ້ານຮ່າງກາຍ ໄດ້ມີຄວາມແຕກຕ່າງກັນ ໄປຕາມວັດທະນະທຳທີ່ແຕກຕ່າງກັນ ຊຶ່ງ ປະກອບດ້ວຍຕົວຢ່າງດັ່ງນີ້:

- ຕີເດັກດ້ວຍມື ຫຼືດ້ວຍວັດຖຸ :(ເຊ່ັນ ໄມແສ້, ສາຍແອວ, ເກີບ, ປື້ມ, ບັນທັດ ແລະອື່ນໆ)
- ເຕະ, ຈັບສັ່ນ ຫຼື ເຕະຖີບເດັກອອກໄປ (ຂວ່ າງເດັກອອກໄປ)
- ຍົກ ຫຼື ດຶງຜົມ.
- ບັງຄັບໃຫ້ເດັກຢືນໃນທ່າທີ່ບໍ່ສະດວກ.
- ບັງຄັບເດັກໃຫ້ອອກກຳລັງກາຍເກີນກຳນົດ ຫຼື ບັງຄັບໃຊ້ແຮງງານ.

- ❖ ເອົາໄຟດາດເດັກ ຫຼື ເຮັດໃຫ້ເດັກຕື່ນຕົກໃຈ.
- ❖ ບັງຄັບໃຫ້ເດັກກິນສິ່ງເປິະເປື້ອນ (ເຊັ່ນ: ກິນສະບູ)
- ❖ ສັ່ງໃຫ້ເອົາຫົວຕຳກະດານ
- ❖ ຄຸເຂົ່າໃສ່ໜາມໜາກນີ້

ໃນຂະນະທີ່ການລົງໂທດທາງດ້ານຮ່າງກາຍ ມີຄວາມໝາຍເພື່ອ ເຮັດໃຫ້ມີຄວາມເຈັບປວດ ທາງ ດ້ານຮ່າງກາຍນັ້ນ, ການລົງໂທດດ້ານອາລົມ ຈິດມີຄວາມໝາຍເພື່ອລົບໜູ່ ດູຖູກເດັກ ແລະ ເຮັດໃຫ້ມີຄວາມເຈັບປວດທາງດ້ານຈິດໃຈ. ເຊັ່ນ ດຽວັບການລົງໂທດທາງດ້ານວາຈາເຊິ່ງຈະຮຸນ ແຮງກວ່າຫຼາຍ.ສິ່ງ ດັ່ງກ່າວປະກອບມີ ເວົ້າເຍາະເຍີ້ຍຢູ່ໃນສາທາລະນະ, ເຍາະເຍີ້ຍແບບແດກດັນ ຫຼືເວົ້າສຽດສີ, ຂົ່ມຂູ່, ດ່າ ແບບຫຍາບຄາຍ, ຮ້ອງສັ່ງການ ຫຼື ການປະພຶດອື່ນໆ ທີ່ມີລັກສະນະລົບໜູ່ ເຊັ່ນ ບໍ່ໃຫ້ເດັກນຸ່ງເຄື່ອງ ຫຼື ບໍ່ ໃຫ້ກິນອາຫານ ຫຼື ບັງຄັບເດັກໃຫ້ຢືນຢູ່ໃນບ່ອນທີ່ບໍ່ມີກຽດ ເພື່ອໃຫ້ທຸກຄົນໄດ້ເຫັນ ແລະ ໃຫ້ເວົ້າຂວັນກ່ຽວ ກັບຕົວເດັກ.

ການລົງໂທດ ທາງດ້ານຮ່າງກາຍ ແມ່ນເຫັນໄດ້ງ່າຍກວ່າ. ການລົງໂທດທາງດ້ານອາລົມຈິດ ແມ່ນຍາກທີ່ຈະສັງເກດເຫັນຫຼາຍກວ່າ. ເຖິງຢ່າງໃດກໍດີການລົງໂທດເດັກ ໂດຍສິ່ງໃຫ້ເຂົາອອກ ໄປ ຢືນ ຢູ່ກາງ ແສງແດດເປັນຫຼາຍຊົ່ວໂມງ, ເພື່ອທຳລາຍຄວາມພາກພູມໃຈໃນຕົນເອງຂອງເດັກ ໂດຍຜ່ານການ ເຍາະເຍີ້ຍ ຂອງສາທາລະນະຊົນ, ປະຕິເສດບໍ່ໃຫ້ເດັກກິນອາຫານ ຫຼື ນຸ່ງເຄື່ອງ ກໍເປັນການເຮັດໃຫ້ ເສຍຫາຍ ຈາກຮູບແບບຕ່າງໆຂອງການລົງໂທດທາງດ້ານຮ່າງກາຍ.

ຍິ່ງໄປກວ່ານັ້ນ, ມັນກໍບໍ່ມີການແບ່ງເສັ້ນອັນຈະແຈ້ງລະຫວ່າງການລົງໂທດທາງຮ່າງກາຍ ແລະ ການລົງໂທດທາງອາລົມຈິດ. ມັກມີເລື້ອຍໆທີ່ເດັກ ຮູ້ສຶກວ່າການລົງໂທດດ້ານຮ່າງກາຍ ກໍ ເປັນການລົບໜູ່ ແລະ ເຮັດໃຫ້ເຊື່ອມເສຍ. ດັ່ງນັ້ນໃນເອກະສານນີ້, ຈຶ່ງບັນຈຸທັງສອງຄຳ ຄື: “ການ ລົງໂທດດ້ານຮ່າງກາຍ ແລະ ການລົງໂທດດ້ານອາລົມຈິດ”

ກິດຈະກຳເພື່ອປະຕິບັດ: ອັນນີ້ແມ່ນການລົງໂທດດ້ານຮ່າງກາຍບໍ່ ?

ໃຫ້ອ່ານກໍລະນີສຶກສາລຸ່ມນີ້. ໃຫ້ຄົ້ນຄິດ ຫຼື ອາດຈະສົນທະນາກັບເພື່ອນຂອງ ທ່ານນີ້ແມ່ນ ການລົງໂທດດ້ານຮ່າງກາຍຫຼືບໍ່ ແລະ ມັນເປັນການໃຫ້ສອນບົດຮຽນແກ່ເດັກຫຼືບໍ່?

ບົດຮຽນຂອງນາງ ຊີຣິນ.

ນາງ ຊີຣິນ ໄປໂຮງຮຽນທຸກໆມື້, ນາງມີຄວາມມ່ວນຊື່ນກັບການຮຽນບົດຮຽນສ່ວນຫຼາຍ ຍົກເວັ້ນການສະກົດຄຳບໍ່ຖືກຕ້ອງຂອງນາງ. ທຸກໆມື້ນາງຢ້ານກົວຫຼາຍ ທີ່ສຸດແມ່ນການຂຽນສະ ກົດຄຳຢູ່ໃນບົດສອບເສັງ.ທຸກຄຳສັບນາງ ແລະເພື່ອນຂອງນາງ ຫຼາຍຄົນຂຽນສະກົດຄຳບໍ່ຖືກຕ້ອງ, ຄູສອນຂອງນາງ ບອກໃຫ້ນາງ ແລະ ໝູ່ເພື່ອນປີນໄຕ່ຂຶ້ນໂພນທາງດ້ານຫຼັງຂອງໂຮງຮຽນ ແລະໃຫ້ ຖືກ້ອນດິນຈີ່ ຫ້າກ້ອນ ລົງມາຈາກໂພນນັ້ນ. ດິນຈີ່ເຫຼົ່ານັ້ນ ແມ່ນເອົາມາໃຊ້ກໍ່ຝາອ້ອມໂຮງຮຽນ. ນາງຊີຣິນບໍ່ເຂົ້າໃຈວ່າການ ຫອບເອົາກ້ອນດິນຈີ່ມານີ້ຈະຊ່ວຍໃຫ້ນັກຮຽນຮູ້ການຂຽນ ສະກົດຄຳ

ແນວໃດ? ນາງບໍ່ມີທາງເລືອກແຕ່ ກໍໄດ້ອອກແຮງງານ. ບາງຄັ້ງຄາວເມື່ອເວລານາງຂົນດິນຈີ່ແລ້ວ ເຄື່ອງຂອງນາງຈະເປື້ອນຫຼາຍທີ່ສຸດ ແລະ ນາງກໍຖືກດ່າຮ້າຍຢູ່ເຮືອນອີກເຊັ່ນດຽວກັນ.

ການລ່ວງໂທດທາງຮ່າງກາຍເປັນສິ່ງທີ່ແຜ່ຫຼາຍຄືແນວໃດ ແລະ ຍ້ອນຫຍັງ ?

ໃຫ້ທ່ານຄິດຄືນຫຼັງ ໃນເວລາເຂົ້າໂຮງຮຽນ. ຄູ ຫຼື ໝູ່ເພື່ອນຂອງທ່ານຜູ້ໃດ ຜູ້ໜຶ່ງໄດ້ຖືກ ລ່ວງໂທດທາງກາຍ ແລະ ທາງດ້ານອາລົມຈິດເລື້ອຍໆບໍ? ມີໂອກາດທີ່ທ່ານຈະເວົ້າວ່າ "ເຈົ້າ/ແມ່ນ ແລ້ວ" ເພາະວ່າການລ່ວງໂທດດ້ານຮ່າງກາຍເປັນການປະຕິບັດ ທີ່ທຳມະດາໄປທົ່ວໂລກ, ມີພຽງ 15 ປະເທດ ເທົ່ານັ້ນ ໃນຈຳນວນ 190 ກວ່າປະເທດໃນໂລກໄດ້ລະຖິ້ມການລ່ວງໂທດ ດ້ານຮ່າງ ກາຍຂອງເດັກ. ຢູ່ໃນຫຼາຍປະເທດທີ່ຍັງເຫຼືອ, ຜູ້ປົກຄອງ ຫຼືຜູ້ດູແລເດັກອື່ນໆ, ລວມເອົາທັງຄູສອນ ຍັງຮັກສາ "ສິດທິ" ໃນການຕີ ແລະລົບໝູ່ເດັກຢູ່.

ໃນຂະນະທີ່ພວກເຮົາສ່ວນຫຼາຍ ໄດ້ປະນາມການກະທຳທີ່ຮຸນແຮງໂດຍລວມໆ ແລະ ຍັງໃຊ້ຄວາມຮຸນແຮງກັບຜູ້ໃຫຍ່, ໂດຍສະເພາະຍັງມີຄົນຈຳນວນໜ້ອຍໜຶ່ງຢູ່ໃນໂລກໃຫ້ຄວາມ ເອົາໃຈໃສ່ຢ່າງຈິງຈັງ ຕໍ່ການໃຊ້ຄວາມຮຸນແຮງຕໍ່ເດັກ. ຍ້ອນຫຍັງ? ຮີດຄອງປະເພນີທີ່ຍັງຄົງຢູ່ ເປັນເວລາຍາວນານ ແລະ ຄວາມເຊື່ອດ້ານວັດທະນະທຳ ຍັງຄົງຮັກສາການນຳໃຊ້ ການລ່ວງໂທດ ທາງດ້ານຮ່າງກາຍຢູ່ໃນສັງຄົມຫຼາຍແຫ່ງ. "ຮັກງົວໃຫ້ຜູກ ຮັກລູກໃຫ້ຕີ, ຖ້າບໍ່ດັ່ງນັ້ນເດັກຈະເສຍ ຄົນ" ເປັນປະໂຫຍກຄຳເວົ້າທີ່ຮູ້ກັນດີທີ່ສຸດອັນໜຶ່ງ. ຍັງມີສິ່ງອື່ນອີກ ທີ່ລວມຢູ່ໃນຄວາມເຊື່ອທີ່ວ່າ ການລ່ວງໂທດທາງດ້ານຮ່າງກາຍ:

(1) ມີປະສິດທິຜົນ,

(2) ປ້ອງກັນ ເດັກບໍ່ໃຫ້ຕົກຢູ່ໃນອັນຕະລາຍ ຫຼືຄວາມລຳບາກ ,

(3) ສິດສອນເຂົາເຈົ້າໃນສິ່ງທີ່ຖືກຈາກສິ່ງທີ່ເຮັດຜິດ ,

(4) ປູກຝັງເທື່ອລະກ້າວໃຫ້ຮູ້ຈັກ ຄວາມເຄົາລົບນັບຖື,

(5) ມັນເປັນສິ່ງແຕກຕ່າງຈາກການທາລຸນດ້ານຮ່າງກາຍ.

ເຖິງຢ່າງໃດກໍດີ, ການວິໄຈໄດ້ສະແດງໃຫ້ເຫັນວ່າ ການລ່ວງໂທດທາງດ້ານຮ່າງກາຍ ບໍ່ ໄດ້ມີຜົນດີຄືດັ່ງກ່າວຂ້າງເທິງ. ໃນຄວາມເປັນຈິງ ແລ້ວມັນເປັນຮູບແບບຂອງການທາລຸນຕໍ່ເດັກ .

ການລ່ວງໂທດທາງດ້ານຮ່າງກາຍ ໃຊ້ໄດ້ຜົນບໍ່ ? ຜົນທີ່ຕາມມາພາຍຫຼັງແມ່ນຫຍັງ?

ການລ່ວງໂທດດ້ານຮ່າງກາຍ ຍັງປະຕິບັດກັນຢູ່ຢ່າງກວ້າງຂວາງ ຍ້ອນຄູຍັງເຊື່ອວ່າມັນໃຊ້ ໄດ້ຜົນ, ມັນມີປະສິດທິຜົນ. ແຕ່ວ່າ ມັນແມ່ນແທ້ບໍ່? ການວິໄຈທີ່ໃຊ້ເວລາກວ່າສອງທົດສະວັດ ໄດ້ຊີ້ໃຫ້ເຫັນວ່າ ຜົນໄດ້ຮັບທາງບວກຂອງການລ່ວງໂທດທາງດ້ານຮ່າງກາຍ ແມ່ນການຍິນຍອມ/ ຟັງຄວາມໃນທັນທີ ເທົ່ານັ້ນ, ໃນຂະນະທີ່ຜົນທີ່ຕາມມາທາງດ້ານລົບແມ່ນມີນ້ຳໜັກຫລາຍກວ່າ. ການນຳໃຊ້ການລ່ວງໂທດທາງດ້ານຮ່າງກາຍ ຍາກທີ່ຈະເຮັດໃຫ້ເກີດຜົນຕາມທີ່ປາຖະໜາ, ເຊິ່ງ ໝາຍເຖິງການປ່ຽນແປງພຶດຕິກຳໄປໃນທາງບວກ ແລະ ຍືນຍົງໃນຕົວຂອງນັກຮຽນ. ໃນທາງກົງ

ກັນຂ້າມມັນສາມາດມີຜົນໄປສູ່ຄວາມຫຼົ້ມຈົມ ແລະ ເປັນໄປໃນທາງລົບທີ່ສຸດສຳລັບນັກຮຽນ ແລະ ຕົວທ່ານເອງ.

- ❖ ເມື່ອເວລາພວກເຮົານຳໃຊ້ການລົງໂທດທາງດ້ານຮ່າງກາຍ, ຜົນທີ່ໄດ້ຮັບຈະບໍ່ສາມາດທຳນາຍໄດ້ ຊຶ່ງຈະລວມມີທັງຄວາມໂສກເສົ້າ, ມີຄວາມພາກພູມໃຈ ໃນຕົນເອງຕ່ຳ, ໂກດເຄືອງ, ດ່າວ່າ, ພຶດຕິກຳກ້າວລ້ຳ, ຢາກແກ້ແຄ້ນ, ຝັນຮ້າຍ, ຍ່ຽວໃສ່ບ່ອນນອນ, ບໍ່ເຄົາລົບການຈັດຕັ້ງ, ມີ ພາວະຈິດໃຈບໍ່ເບີກບານແຈ່ມໄສ, ມີຄວາມກັງວົນ, ໃຊ້ຢາເສບຕິດ, ມີການທຳລຸນທາງເພດ, ທຳລຸນເດັກ, ທຳລຸນຄູ່ຜົວເມຍ, ເປັນເດັກທີ່ມີພຶດຕິກຳເຫຼືອໄຫຼ ແລະ ທີ່ແນ່ນອນແມ່ນຈະມີການລົງໂທດ ທາງດ້ານຮ່າງກາຍ ເພີ່ມຂຶ້ນ.
- ❖ ໃນໄລຍະຍາວ,ເດັກຜູ້ຖືກລົງໂທດດ້ານຮ່າງກາຍ ໄດ້ສະແດງໃຫ້ເຫັນການພັດທະນາພຶດຕິກຳ ຕ້ານສັງຄົມ ແລະ ກໍມັກຈະເຂົ້າຮ່ວມໃນການກະທຳຮຸນແຮງໄດ້ໄວ, ອັນເປັນການສ້າງການທຳລຸນດ້ານຮ່າງກາຍຢ່າງຕໍ່ເນື່ອງຈາກ ເຊັ່ນ ຄົນນີ້ໄປຫາ ເຊັ່ນ ຄົນຕໍ່ໄປ. ໂດຍ ການ ນຳໃຊ້ຄວາມ ຮຸນແຮງ, ພວກເຮົາກໍຈະສອນຄວາມຮຸນແຮງ.
- ❖ ໃນຖານະທີ່ເປັນຄູສອນ ພວກເຮົາມີຄວາມຮັບຜິດຊອບເພື່ອປັບປຸງການຂະຫຍາຍຕົວ ແລະ ການພັດທະນາຂອງນັກຮຽນພວກເຮົາ. ການລົງໂທດທາງດ້ານຮ່າງກາຍ ສາມາດ ສ້າງຄວາມເສຍຫາຍໃຫ້ແກ່ການພັດທະນາເດັກ ເປັນຜົນສະທ້ອນຕໍ່ບັນຫາຂອງການປັບ ຕົວ ທາງດ້ານການສຶກ ສາ ກໍຄືດ້ານສັງຄົມ, ມະນຸດສຳພັນ ແລະຈິດຕະວິທະ ຍາ. ຕົວຢ່າງ ຈາກການສຶກສາວິໄຈໄດ້ສະແດງໃຫ້ເຫັນວ່າຜູ້ທີ່ຕົກ ເປັນເຫຍື່ອຂອງການລົງໂທດທາງ ດ້ານ ຮ່າງກາຍ ຈະຖືກກົດດັນໃຫ້ ປະລະການຮຽນ ເນື່ອງຈາກວ່າເຂົາຢ້ານຖືກຕີ ແລະຖືກລົບໜູ່. ເມື່ອຢູ່ນອກໂຮງຮຽນເຂົາເຈົ້າ ອາດຈະເຂົ້າຮ່ວມຂະບວນການເສບ ຫຼື ຂາຍຢາເສບຕິດ ແລະ ເຮັດກິດຈະກຳອື່ນໆ ທີ່ສັງຄົມ ຍອມຮັບບໍ່ໄດ້,
- ❖ ເຖິງແມ່ນວ່າໃນເຮົາຈະສາມາດຢຸດຕິການປະພຶດທີ່ບໍ່ເໝາະສົມໄດ້ສຳເລັດເປັນເວລາຊົ່ວ ຄາວ, ການນຳໃຊ້ການລົງໂທດທາງດ້ານຮ່າງກາຍຂອງພວກເຮົາ ຍັງຈະບໍ່ສາມາດບົ່ມ ສອນພຶດຕິກຳອັນເໝາະສົມໃຫ້ແກ່ເດັກໄດ້. ຍ້ອນຫຍັງ ? ເດັກບໍ່ໄດ້ຮູ້ ຫຼືບໍ່ໄດ້ຮຽນຮູ້ວ່າຈະ ເຮັດຫຍັງແດ່, ການປະພຶດອັນໃດແດ່ທີ່ເຂົາຕ້ອງນຳມາປະຕິບັດ ນອກຈາກການຍຸດຕິສິ່ງ ທີ່ເຂົາເຈົ້າກຳລັງເຮັດຜິດຢູ່ເທົ່ານັ້ນ.. ມັນກໍ່ຄ້າຍຄືກັນກັບການບອກ ໃຫ້ທ່ານບໍ່ໃຫ້ໃຊ້ການ ລົງໂທດທາງດ້ານຮ່າງກາຍ, ແຕ່ແລ້ວບໍ່ສອນໃຫ້ ທ່ານ ຮູ້ວິທີການປະຕິບັດວິໄນແບບ ອື່ນໆທີ່ເໝາະສົມ ທີ່ທ່ານຈະສາມາດນຳໃຊ້ໄດ້.
- ❖ ການນຳໃຊ້ການລົງໂທດທາງດ້ານຮ່າງກາຍຂອງພວກເຮົາ ບາງຄັ້ງກໍສາມາດຖືກຕີກັບ ຊຶ່ງມັນສາມາດເຮັດໃຫ້ມີຄວາມແຂງແກ່ນຂຶ້ນຢ່າງບໍ່ໄດ້ຕັ້ງໃຈ. ຕົວຢ່າງ. ເມື່ອເວລາມີ ຄວາມເອົາໃຈໃສ່ຈາກຄູສອນ ແລະ ໝູ່ເພື່ອນ, ບາງຢ່າງທີ່ເດັກທີ່ປະພຶດບໍ່ດີ, ຄືດັ່ງທ້າວ ເຮມອນອາດເກີດການຊອກຫາຄຳແນະນຳ..

- ❖ ການລົງໂທດທາງດ້ານຮ່າງກາຍ ມັກຈະສ້າງຄວາມແຄ້ນເຄືອງ ແລະ ຄວາມເປັນສັດຕູເລື້ອຍໆ, ການຈະເຮັດໃຫ້ມີການພົວພັນ ແລະຄວາມເຊື່ອຖືອັນດີ ລະຫວ່າງ ຄູ-ນັກຮຽນ ແລະນັກຮຽນ-ນັກຮຽນນັ້ນຍາກທີ່ຈະສ້າງຂຶ້ນໄດ້ໃນອະນາຄົດ. ດັ່ງນັ້ນ ມັນຈຶ່ງເຮັດໃຫ້ວົງການຂອງພວກເຮົາຍາກ ຂຶ້ນ, ຜົນຕອບແທນໜ້ອຍລົງ ແລະ ຖືກກີດກັນຢ່າງໃຫຍ່ຫລວງ. ພວກເຮົາຈະເລີ່ມມີຄວາມກັງ ວົນທີ່ສຸດທີ່ຈະເຂົ້າໄປໃນຫ້ອງຮຽນແລ້ວສິດສອນ. ນັກຮຽນຂອງພວກເຮົາອາດມີຄວາມຮູ້ສຶກ ຕໍ່ຄວາມບໍ່ພໍໃຈຂອງພວກເຮົາແລະ ປະຕິເສດ ການມາຮຽນ ເຊັ່ນກັນ.
- ❖ ເດັກນັກຮຽນ ຜູ້ທີ່ຕົກເປັນເຫຍື່ອ ຂອງການລົງໂທດທາງດ້ານຮ່າງກາຍອາດຈົບລົງດ້ວຍການບາດເຈັບ ແລະ ຈຳເປັນຕ້ອງປິ່ນປົວ, ປ່ອຍເປັນຄວາມເສຍຫາຍຖາວອນ ຫຼື ອາດເຮັດໃຫ້ເສຍຊີວິດ. ເຖິງຈະເປັນພຽງການຂົ່ມຂູ່ທີ່ຈະລົງໂທດທາງດ້ານຮ່າງກາຍ ກໍສາມາດເຮັດໃຫ້ເກີດຄວາມເສຍ ຫາຍໄດ້, ຕົວຢ່າງ ເມື່ອເວລາຄູສອນຂົ່ມຂູ່ຈະໃຊ້ໄມ້ແສ້ ແລະ ໃນເວລາຍົກໄມ້ແສ້ຂຶ້ນຄູເອົາໄມ້ກະແທກໃສ່ຕານັກຮຽນອອກມາໂດຍບໍ່ໄດ້ຕັ້ງໃຈ. (ໜ້າເສຍໃຈ ເຫດການນີ້ໄດ້ເກີດຂຶ້ນຈິງ).

2. ຄວາມໝາຍຂອງການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ

ຄຳວ່າການປະຕິບັດວິໄນແມ່ນຄຳສັບທີ່ມັກຈະໃຊ້ຜິດເລື້ອຍໆ, ພິເສດໃນເວລາມັນຖືກຕີຄວາມ ໝາຍໃຫ້ເທົ່າກັບການລົງໂທດ. ຕໍ່ກັບຄວາມເຂົ້າໃຈຂອງຄູສອນຫຼາຍຄົນ, ການປະຕິບັດວິໄນໝາຍເຖິງ ການລົງໂທດ “ເດັກຜູ້ນີ້ ຈຳເປັນຕ້ອງ ໃສ່ວິໄນ” ຈະຖືກແປເປັນ “ເດັກຜູ້ນີ້ຈຳເປັນຕ້ອງຕີ ຫຼື ຂ້ຽນດ້ວຍແສ້” ອັນນີ້ແຫຼະ ຄື ຜິດ!

ການປະຕິບັດວິໄນ ແມ່ນການປະຕິບັດການສິດສອນ ຫຼື, ສຶກສາອົບຮົມຄົນໃຫ້ເຊື່ອຟັງລະບຽບ ຫຼືກົດຂອງການປະພຶດ ຢູ່ໃນໄລຍະສັ້ນ ແລະໄລຍະຍາວ.

ໃນຂະນະທີ່ການລົງໂທດມີຄວາມໝາຍ ເພື່ອ**<u>ຄວບຄຸມ</u>**ການປະພຶດຂອງເດັກນັ້ນ, ການໃສ່ວິໄນ ຈະມີຄວາມໝາຍ ເພື່ອ**<u>ພັດທະນາ</u>**ການປະພຶດຂອງເດັກ, ພິເສດແມ່ນເລື່ອງການປະພຶດຕົວໃນສະຖານະ ການຕ່າງໆ. ຄວາມໝາຍວ່າ ສອນເດັກນັກຮຽນໃຫ້ມີຄວາມສາມາດ ຄວບຄຸມຕົນເອງ ແລະມີຄວາມເຊື່ອ ໝັ້ນ ໂດຍເລັ່ງໃສ່ສິ່ງທີ່ພວກເຮົາຕ້ອງການໃຫ້ເດັກໄດ້ຮຽນຮູ້ ແລະ ສິ່ງທີ່ເດັກມີຄວາມອາດສາມາດ ໃນການຮຽນຮູ້. ອັນນີ້ ເປັນພື້ນຖານ ສຳລັບແນະນຳເດັກ ກ່ຽວກັບວິທີການຢູ່ຮ່ວມກັນດ້ວຍຄວາມ ປອງດອງກັບພວກເຂົາເອງ ແລະ ຢູ່ຮ່ວມກັບຜູ້ອື່ນໆ. ເປົ້າໝາຍສຸດຍອດຂອງການປະຕິບັດວິໄນ ແມ່ນ ເພື່ອໃຫ້ເດັກເຂົ້າໃຈການປະພຶດຂອງເຂົາເອງ, ມີແນວຄິດລິເລີ່ມ, ມີຄວາມຮັບຜິດຊອບຕໍ່ສິ່ງທີ່ເລືອກ ການປະພຶດປະຕິບັດຂອງຕົນ, ເຄົາລົບນັບຖືຕົນເອງ ແລະ ຜູ້ອື່ນໆ. ເວົ້າອີກດ້ານໜຶ່ງ, ເຂົ້າຍອມຮັບ ແລະ ຊຶມຊັບເອົາຂະບວນ ການຄົ້ນຄິດ

ແລະ ການປະພຶດໃນທາງບວກທີ່ສາມາດສືບຕໍ່ຄົງຢູ່ໃນຊີ່ວຊີວິດຂອງເຂົາ. ຕົວຢ່າງ, ເມື່ອເວລາ ທ່ານນຶກເຖິງ “ຄົນທີ່ມີວິໄນ”, ທ່ານນຶກເຖິງອັນໃດ? ນັກກິລາກາຍຍະກຳ (gymnast) ກິລາໂອລິມ ປິກ ຜູ້ທີ່ຢຸດເຊົາຄວາມຊິນເຄີຍທີ່ບໍ່ດີ ເຊັ່ນ ເຊົາສູບຢາ, ຜູ້ທີ່ລະງັບສະຕິອາລົມຢູ່ໃນທ່ານກາງ ຄວາມສັບສົນ. ທັງໝົດເຫຼົ່ານີ້ ມັນຮຽກຮ້ອງໃຫ້ມີການຄວບຄຸມຕົນເອງ ຊຶ່ງແມ່ນເປົ້າໝາຍ ຂອງການປະຕິບັດວິໄນ.

ການປະຕິບັດວິໄນ ຈະປະກອບສ້າງຮູບແບບຂອງການປະພຶດຂອງເດັກ ແລະ ຊ່ວຍໃຫ້ ເຂົາຮຽນຮູ້ການຄວບຄຸມຕົນເອງເມື່ອໃຫ້ການຊຸກຍູ້ສິ່ງເສີມ, ບໍ່ມີຄວາມເຈັບປວດ ແລະ ບໍ່ແມ່ນໃຫ້ ຜົນທີ່ຕາມມາ ໂດຍບໍ່ມີຄວາມໝາຍສຳຄັນ. ຖ້າຫາກທ່ານເປັນຜູ້ປົກຄອງ ຫລື ເພື່ອນຂອງທ່ານ ມີເດັກ, ໃຫ້ທ່ານຄິດຄືນ ເຖິງເດັກໃນເວລາປີທຳອິດ ຫລືປີທີສອງ. ເດັກນ້ອຍຖືກສອນແນວໃດ ເພື່ອໃຫ້ຮູ້ຕົບມື, ຍ່າງ ຫຼືເວົ້າ. ທ່ານ ຫຼືເພື່ອນຂອງທ່ານອາດນຳໃຊ້ເຕັກນິກການສິດສອນ ຄື ສະແດງຕົວຢ່າງໃຫ້ເບິ່ງ ຄືເປັນທີ່ຮູ້ກັນ “ການເປັນ ແບບຢ່າງ” ລວມທັງການໃຫ້ຄຳຍ້ອງຍໍ ແລະໃຫ້ໂອກາດເພື່ອປະຕິບັດ, ບໍ່ແມ່ນ ຮ້ອງໃສ່, ຕີ, ດູຖູກ ຫຼື ຂົ່ມຂູ່. ການຊຸກຍູ້ສິ່ງເສີມ ອັນນີ້ມັນແມ່ນປະເພດການຍ້ອງຍໍທີ່ກະຕຸ້ນນັກຮຽນ ໃຫ້ເຮັດວຽກ, ໃຫ້ຮຽນ ແລະໄດ້ຮັບ ຜົນສຳ ເລັດ. ມັນເປັນການສ້າງຄວາມພາກພູມໃຈໃນຕົນເອງຍ້ອນວ່າເດັກ ນັກຮຽນໄດ້ຮ່ຳຮຽນສິ່ງທີ່ເຂົາ ເຈົ້າໄດ້ມີຄວາມຮັບຜິດຊອບໂດຍກົງ ເພື່ອໄດ້ມາເຊິ່ງການຍ້ອງຍໍ ຫຼື ການຍົກຍ້ອງໃຫ້ລາງວັນ ອື່ນໆ. ເດັກນັກຮຽນ ສາມາດເລືອກເພື່ອໃຫ້ໄດ້ມາ ຫຼື ບໍ່ໄດ້ມາ. ສິ່ງດັ່ງກ່າວນີ້ ຈະໃຫ້ຄວາມ ຮູ້ສຶກ ຂອງ ການຄວບຄຸມວິຖີຊີວິດຂອງເຂົາ ຊຶ່ງເປັນສ່ວນປະກອບຫຼັກສຳລັບຄວາມພາກພູມ ໃຈໃນຕົນ ເອງທີ່ແຂງແຮງ. ເຊັ່ນດຽວກັນ, ການບໍ່ຊຸກຍູ້ສິ່ງເສີມ ການປະພຶດຜິດ ເຊັ່ນ ບໍ່ເອົາໃຈໃສ່ ຮຽນເອົາ ນິໄສສັນດານ ໂມໂຫໂຫໂສ ຫຼືມາຮອດຫ້ອງຮຽນຊ້າ ຈະເປັນການສອນເດັກນັກຮຽນ ໃຫ້ມີການ ຄວບຄຸມຕົນເອງໄປຕາມການເວລາ, ຖ້າຫາກວ່າເຂົາເຈົ້າບໍ່ມີຄວາມ ຕັ້ງໃຈຈະທົດລອງເຮັດການ ປະພຶດແນວບໍ່ດີ. ເດັກຈະ ໄດ້ຮຽນຮູ້ວ່າ ເຂົາໄດ້ຄວາມສົນເມື່ອ ເຂົາປະພຶດແບບສຸຂຸມ ຫຼື ມາທັນ ເວລາ ພຽງເທົ່ານັ້ນ; ອັນນັ້ນແມ່ນ ທ່ານສ້າງເຂົາໃຫ້ເປັນຄົນດີ.

ປຽບທຽບການປະຕິບັດວິໄນ ແລະ ການລົງໂທດ

ການປະຕິບັດວິໄນແມ່ນ:	ການລົງໂທດແມ່ນ:
ການໃຫ້ທາງເລືອກທາງບວກແກ່ນັກຮຽນ	ຖືກບອກພຽງຢ່າງດຽວວ່າ **ຢ່າ** ເຮັດສິ່ງນັ້ນ.
ການຮັບຮູ້ ຫຼືຍ້ອງຍໍຄວາມພະຍາຍາມ ແລະ ການປະພຶດດີຂອງນັກຮຽນ.	ການມີປະຕິກິລິຍາຫຍາບຄາຍຕໍ່ການປະພຶດຜິດ.
ເມື່ອນັກຮຽນປະຕິບັດຕາມລະບຽບ ແມ່ນຍ້ອນວ່າ ເຂົາ ໄດ້ສົນທະນາ ແລະ ຕົກລົງເຫັນດີດ້ວຍກັນກ່ອນແລ້ວ	ເມື່ອນັກຮຽນປະຕິບັດຕາມລະບຽບ ແມ່ນຍ້ອນວ່າ ເຂົາຖືກຂົ່ມຂູ່ ຫຼືໄດ້ຮັບສິນຈ້ຳໆ.
ການແນະນຳຢ່າງສະເໝີຕົ້ນສະເໝີປາຍ ແລະ ໝັ້ນຄົງ	ການຄວບຄຸມ, ການເຮັດໃຫ້ລະອາຍ, ການຫົວ

	ເຢາະເຢີ້ຍ
ການປະຕິບັດໃນແງ່ບວກ, ການເຄົາລົບນັບຖືຂອງເດັກ	ການປະຕິບັດໃນແງ່ລົບ, ບໍ່ມີການເຄົາລົບນັບຖືຂອງເດັກ
ບໍ່ໃຊ້ຄວາມຮຸນແຮງທາງດ້ານວາຈາ ແລະ ຮ່າງກາຍ	ໃຊ້ຄວາມຮຸນແຮງທາງດ້ານວາຈາ ແລະ ຮ່າງກາຍ ແລະ ກ້າວລ້ຳ
ຜົນທີ່ໄດ້ຮັບຈາກການປະຕິບັດວິໄນມີເຫດມີຜົນ ກ່ຽວພັນ ໂດຍກົງກັບການ ປະພຶດຜິດ.	ຜົນທີ່ໄດ້ຮັບຈາກການລົງໂທດ ບໍ່ກ່ຽວພັນກັບການ ປະພຶດຜິດ ແລະ ປາສະຈາກເຫດຜົນຕໍ່ກັບການ ປະພຶດຜິດ.
ເມື່ອເດັກຕ້ອງແກ້ໄຂປ່ຽນແປງ ເວລາພຶດຕິກຳ ຂອງເຂົາມີ ຜົນກະທົບດ້ານລົບຕໍ່ຜູ້ອື່ນ.	ເມື່ອເວລາເດັກຖືກລົງໂທດ ຍ້ອນເຮັດໃຫ້ຜູ້ອື່ນເຈັບ/ ເສຍຫາຍ, ແທນທີ່ຈະຈະສະແດງໃຫ້ເຫັນວິທີແກ້ໄຂ ປ່ຽນແປງນັ້ນເຮັດຄືແນວໃດ.
ມີຄວາມເຂົ້າໃຈເຖິງລະດັບຄວາມສາມາດຂອງນັກຮຽນ ລາຍບຸກຄົນ, ຄວາມຕ້ອງ ການທີ່ຈຳເປັນ, ສະພາບແວດ ລ້ອມ ແລະຂັ້ນຕອນຂອງການພັດທະນາ.	ບໍ່ເໝາະສົມຕໍ່ຂັ້ນຕອນ ການພັດທະນາຊີວິດຂອງ ເດັກ; ສະພາບແວດລ້ອມຂອງເດັກລາຍບຸກຄົນ, ລະ ດັບຄວາມສາມາດ ແລະ ຄວາມຕ້ອງທີ່ຈຳເປັນຂອງ ລາຍບຸກຄົນ ບໍ່ໄດ້ນຳມາພິ ຈາລະນາ.
ການສອນເດັກໃຫ້ຍອມຮັບ ຫຼືຊາບຊຶມ ລະບຽບວິໄນໃນຕົນເອງ	ການສອນເດັກໃຫ້ປະພຶດດີ ສະເພາະໃນເວລາເຂົາມີ ຄວາມສ່ຽງຕໍ່ການຖືກຈັບຜິດເມື່ອປະພຶດຢ່າງອື່ນ.
ການຟັງ ແລະ ການເປັນແບບຢ່າງ	ການຕຳນິວ່າກ່າວເດັກຕະຫຼອດ ໃນເວລາເຮັດຜິດ ລະບຽບເລັກໆນ້ອຍໆ ເປັນເຫດໃຫ້ເຂົາບໍ່ເດີນຕາມ ຮອຍເຮົາ (ບໍ່ສົນໃຈເຮົາ ແລະ ບໍ່ຟັງເຮົາ) .
ການນຳໃຊ້ຄວາມຜິດໃຫ້ເປັນບົດຮຽນ ຫຼື ໂອກາດໃນ ການຮຽນຮູ້	ການບັງຄັບເດັກໃຫ້ທຳຕາມລະບຽບແບບບໍ່ມີເຫດ ບໍ່ ມີຜົນ “ເພາະພຽງຍ້ອນວ່າທ່ານໄດ້ບອກໄດ້ເຕືອນໄປ ຢ່າງນັ້ນແລ້ວ”
ເລັ່ງໃສ່ທີ່ພຶດຕິກຳຂອງເດັກເທົ່ານັ້ນ-ບໍ່ແມ່ນຕົວເດັກ, ເຊັ່ນ: ບອກວ່າການປະພຶດຂອງເຈົ້າຜິດ.	ການຕຳນິວິຈານຕົວເດັກ, ແທນທີ່ຈະຕຳນິແຕ່ສະເພາະ ສິ່ງທີ່ເດັກປະພຶດຜິດ-ແຕ່ໄປເວົ້າວ່າ ເຈົ້ານີ້ໂງ່ທີ່ສຸດ, ເຈົ້າກະທຳຜິດ.

2.1 ການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນໃນຫ້ອງຮຽນ

ເດັກນັກຮຽນມີຄວາມຈຳເປັນຕ້ອງຖືກສອນເພື່ອໃຫ້ເຂົ້າໃຈ ແລະ ປະຕິບັດຕາມລະບຽບ ຂອງສັງ ຄົມ. ຫຼັກຖານໄດ້ຊີ້ໃຫ້ເຫັນວ່າເດັກຍິງ ແລະ ຊາຍຈະຕອບຮັບຕໍ່ວິທີການໃນທາງບວກ ໄດ້ດີກວ່າ ເຊິ່ງລວມທັງການເຈລະຈາ ແລະ ລະບົບການຍ້ອງຍໍ ຫຼາຍກວ່າການລົງໂທດຜ່ານ ການທາລຸນທາງວາຈາ, ຮ່າງກາຍ ຫຼື ອາລົມຈິດ.

ໃຫ້ທ່ານອ່ານບົດລະຄອນຫ້ອງຮຽນຕໍ່ໄປນີ້ ແລະ ໃຫ້ເບິ່ງຖ້າຫາກທ່ານສາມາດກຳນົດວິ ທີການ ທາງບວກ ຫຼືທາງລົບທີ່ຄູສອນຈັດການກັບການປະພຶດຜິດຂອງນັກຮຽນ.

ລະຄອນສາກທີ 1 .

ສາວຄູ ເລັກ ຍ່າງເຂົ້າໄປໃນຫ້ອງຊັ້ນ ປ.4 ຂອງຕົນ ຊຶ່ງກຽມພ້ອມຈະເລີ່ມຕົ້ນສອນ ບົດຮຽນວິຊາຄະນິດສາດ. ໃນຂະນະທີ່ນາງເລີ່ມຕົ້ນສອນບົດຮຽນນັ້ນນັກຮຽນ ຂອງນາງຍັງສືຕ່ ເວົ້າລົມກັນຢູ່ ແລະກໍ ບໍ່ຟັງລາວ; ນາງເວົ້າຂຶ້ນຢ່າງດັງໆວ່າ “ທຸກໆຄົນ ກະລຸນາເຊົາລົມກັນ ພວກ ເຮົາຈະເລີ່ມຕົ້ນບົດຮຽນ ຂອງພວກເຮົາດຽວນີ້” ທຸກຄົນມິດງຽບລົງ ຍົກເວັ້ນ ທ້າວໄຈ. ໄຈຍັງຄົງ ລົມກັນກັບໝູ່ ກ່ຽວກັບເກມບານເຕະທີ່ລາວໄດ້ເບິ່ງຢູ່ໃນໂທລະພາບໃນຄືນຜ່ານມາ. ຄູ ເລັກ ຮ້ອງ ຂຶ້ນ “ ທ້າວ ໄຈ ເປັນຫຍັງເຈົ້າຈຶ່ງບໍ່ ສາມາດຫຸບປາກຂອງເຈົ້າ?, ໃຫ້ເຈົ້າໄປຢືນຢູ່ແຈຫ້ອງຮຽນ ແລ້ວປິ່ນໜ້າເຂົ້າຫາຝາ. ເຈົ້າເຮັດໃຫ້ມີຄວາມ ລຳຄານຫຼາຍກວ່າທີ່ເຈົ້າຮູ້ສຶກ. ໃຫ້ເຈົ້າລໍຖ້າ ຈົນກວ່າຫ້ອງຮຽນຈະເລີກ” ຫົວໜ້າ ໂຮງຮຽນທີ່ຍ່າງຜ່ານມາ ທາງຫ້ອງຮຽນໄດ້ຖາມວ່າ “ເຈົ້າຕ້ອງ ການໃຫ້ຂ້ອຍບອກໃຫ້ລາວ ຮູ້ບໍ່ວ່າໃຜເປັນນາຍໃຫຍ່ແຖວນີ້?” ທ້າວໄຈ ຮ້ອງໄຫ້ຂຶ້ນ ແລະ ຍ່າງໄປຢືນຢູ່ແຈຫ້ອງຮຽນ, ລາວມີຄວາມຢ້ານຕໍ່ຄວາມໂຊກຮ້າຍຂອງລາວ ແລະ ປາຖະໜາ ບໍ່ ຢາກ ຢູ່ໃນທີ່ນັ້ນ. ບາງທີໃນມື້ອື່ນ ທ້າວ ໄຈ ອາດຈະບໍ່ມາໂຮງຮຽນ.

ລະຄອນສາກ ທີ 2.

ສາວຄູ ເລັກ ຍ່າງເຂົ້າໄປໃນຫ້ອງຊັ້ນ ປ4 ຂອງລາວ ຊຶ່ງກຽມພ້ອມຈະເລີ່ມຕົ້ນ ສອນ ວິຊາ ຄະ ນິດສາດ. ໃນຂະນະທີ່ນາງຍ່າງເຂົ້າໄປໃນຫ້ອງ ນາງເວົ້າວ່າ “ກະລຸນາໃຫ້ທຸກໆຄົນມິດ ງຽບ ລົງ. ພວກເຮົາຈະເລີ່ມຕົ້ນຮຽນວິຊາຄະນິດສາດ ແລະ ທຸກຄົນຈຳເປັນຕ້ອງຟັງຢ່າງຈົດຈໍ່” ພາຍ ຫລັງ ນັກ ຮຽນ ໃນຫ້ອງ ມິດງຽບລົງ, ຄູ ເລັກ ຍັງໄດ້ຍິນທ້າວ ໄຈ ເວົ້າກັບໝູ່ຂອງລາວຢູ່. ຄູ ເລັກ ຖາມຂຶ້ນວ່າ “ແມ່ນໃຜຍັງເວົ້າ ລົມກັນຢູ່? ຄູເດົາໄດ້ວ່າ ຍັງມີຜູ້ໃດຜູ້ໜຶ່ງບໍ່ສາມາດຈື່ຈຳກົດລະບຽບ ຢູ່ໃນຫ້ອງຮຽນນີ້ໄດ້. ຫົວໜ້າ ໂຮງຮຽນທີ່ຍ່າງຜ່ານມາໄດ້ຍິນຄຳເວົ້າຂອງຄູເລັກ ແລະ ເພີ່ນໄດ້ ຖາມ ຂຶ້ນ ດ້ວຍຄວາມຮ້າຍວ່າ ຖ້າຫາກມີ ບັນຫາຢູ່ໃນທີ່ນີ້ ເພີ່ນຮູ້ວ່າຈະເຮັດ ແນວໃດ ເພື່ອເຮັດໃຫ້ງຽບລົງທັນທີ. ນາງຄູ ເລັກ ຂອບໃຈນຳເພີ່ນ ແລະ ໄດ້ບອກເພີ່ນວ່າ ນາງສາ ມາດຈັດການກັບສະຖານະການ ນີ້ໄດ້ໃນດຽວນີ້. ຫຼັງຈາກຫົວໜ້າ ໂຮງຮຽນເດີນ ຈາກໄປ, ຄູ ເລັກ ຫຼຽວມາຫາງ ທ້າວ ໄຈ ແລະ ຖາມວ່າ “ເອື້ອຍເປັນຫ່ວງວ່າ ເປັນຫຍັງຫົວໜ້າໂຮງຮຽນ ຈຶ່ງເວົ້າແນວນັ້ນ” ພວກນ້ອງ ມີຄວາມເຫັນຫຍັງບໍ່? “ມີຄວາມຜິດ, ທ້າວ ໄຈ ຕອບຄຳຖາມຂອງຄູ ເລັກ ”ນ້ອງຍັງເວົ້າລົມກັນຢູ່ ພາຍຫຼັງທີ່ເອື້ອຍຄູ ບອກໃຫ້ທຸກຄົນໃນຫ້ອງມິດງຽບລົງ “ ນາງຄູ ເລັກ ຖາມວ່າ ”ເວລາໃດທີ່ພວກເຮົາທຸກຄົນສາມາດເວົ້າລົມກັນ ໄດ້ໂດຍບໍ່ລົບກວນຜູ້ອື່ນ ແລະ ບໍ່ ລົບກວນ ໂອກາດການ ຮຽນໜັງສື ຂອງເຂົາເຈົ້າ“ ທ້າວ ໄຈ ເວົ້າວ່າ ໃນເວລາເລີກໂມງສອນແລ້ວ. “ນາງຄູ ເລັກ ງຶກຫົວ ແລະ ບອກທ້າວ ໄຈ ໃຫ້ຕອບຄຳຖາມນາງວ່າ 100 ຫານໃຫ້ 2 ມີຄ່າເທົ່າ ກັບເທົ່າໃດ. ທ້າວ ໄຈ ຕອບວ່າ ເທົ່າກັບ 50. ນາງຄູ ເລັກ ຍິ້ມ ແລະເວົ້າວ່າ “ດີຫຼາຍ“ ທ້າວໄຈ ເອົາໃຈໃສ່ພິເສດຕະຫລອດໄລຍະເວລາຮຽນໃນຫ້ອງ ແລະ ບໍ່ເວົ້າລົມກັບໝູ່ຈົນກວ່າໝົດຊົ່ວ ໂມງ ສອນໃນຫ້ອງຮຽນ.

ລະຄອນສາກທີ 3 .

ສາວຄູເລັກຍ່າງເຂົ້າໄປໃນຫ້ອງຊັ້ນ ປ4 ຂອງລາວ ຊຶ່ງກຽມພ້ອມຈະເລີ່ມຕົ້ນສອນວິຊາຄະນິດສາດ. ໃນຂະນະທີ່ນາງຍ່າງເຂົ້າໄປໃນຫ້ອງ ນາງເວົ້າວ່າ "ກະລຸນາໃຫ້ທຸກໆຄົນມິດງຽບລົງ. ພວກເຮົາຈະເລີ່ມຕົ້ນຮຽນວິຊາຄະນິດສາດ ແລະ ທຸກຄົນຈຳເປັນຕ້ອງຟັງຢ່າງຈິດຈໍ່" ພາຍຫລັງນັກຮຽນ ໃນຫ້ອງ ມິດງຽບລົງ, ຄູ ເລັກ ຍັງໄດ້ຍິນທ້າວ ໄຈ ເວົ້າກັບໝູ່ຂອງລາວຢູ່. ຄູ ເລັກ ຖາມຂຶ້ນວ່າ "ແມ່ນໃຜຍັງເວົ້າລົມ ກັນຢູ່. ຄູ ເລັກ ໄດ້ຈັບເອົາແຜ່ນເຈ້ຍລະເມີດລະບຽບອອກມາ ແລ້ວຂຽນລົງວ່າ " ຫຼິ້ນເຫຼວໃນການປະ ຕິບັດຕາມກົດລະບຽບຂອງຫ້ອງຮຽນ " ແລະ ແລ້ວຄູກໍບອກ ໃຫ້ທ້າວ ໄຈຂຽນຊື່ຂັ້ນຮຽນ, ຄູ, ເວລາ ແລະ ວັນທີໃສ່ຂ້າງເທິງ. ຄູ ເລັກເວົ້າວ່າ " ໄຈ ຄູຈະເອົາເຈ້ຍແຜ່ນນີ້ປະໄວ້ແຈໂຕະຂອງນ້ອງນີ້. ຖ້າເຈ້ຍ ຍັງຢູ່ນີ້ ໃນເວລາໝົດຊົ່ວໂມງຮຽນແລ້ວ ນ້ອງອາດ ເອົາ ມັນຖິ້ມອອກໄປໄດ້. ຖ້າຫາກນ້ອງສືບຕໍ່ເວົ້າລົມ ໂດຍບໍ່ໄດ້ຮັບອານຸຍາດ ຄູຈະຈັບເອົາເຈ້ຍນີ້ ໄປໃຫ້ຫ້ອງການຫົວໜ້າໂຮງຮຽນ ເພື່ອໃຫ້ເພີ່ນເຫັນ " ໃນຕອນທ້າຍຊົ່ວໂມງ ທ້າວໄຈ ເອົາເຈ້ຍແຜ່ນນັ້ນ ຖິ້ມອອກໄປ.

ຖ້າຫາກເຕັກນິກການໃສ່ວິໄນເປັນດ້ານລົບ ມັນອາດເຮັດໃຫ້ນັກຮຽນ ມີຄວາມທໍ້ຖອຍ ແລະ ທຳລາຍນັກຮຽນ. ເຖິງຢ່າງໃດກໍດີ, ຖ້າຫາກເຕັກນິກການໃສ່ວິໄນເປັນດ້ານບວກ, ມັນຈະ ຊ່ອຍ ນັກ ຮຽນໄດ້ຮັບ ແລະ ຮັກສາການປະພຶດອັນດີ. ຢູ່ໃນລະຄອນສາກທີ 1 ແລະທີ 2 ຂ້າງເທິງ, ເຮົາສາມາດເຫັນສະພາບການດ້ານລົບລະຫວ່າງຄູເລັກ ແລະ ທ້າວໄຈ.ພວກທ່ານສາມາດລະບຸ/ ກຳນົດ ໄດ້ບໍ່ ?

ຄຳຕອບ: ຢູ່ໃນສາກທີ1: ຄູເລັກ ແລະ ຫົວໜ້າໂຮງຮຽນ ທັງສອງຄົນໄດ້ສະແດງຄວາມ ຮ້າຍອອກມາ. ພວກເພິ່ນຂົ່ມຂູ່ ທ້າວ ໄຈ "ເຈົ້າຈົ່ງລໍຖ້າຈົນກວ່າຫ້ອງຮຽນຈະເລີກ" ແລະ ເຈົ້າຕ້ອງການໃຫ້ ຂ້ອຍ ບອກມັນ ບໍ່ວ່າໃຜເປັນນາຍ? "ຄູ ເລັກ ກ່ຳໃຊ້ ການລົງໂທດແບບບໍ່ມີເຫດຜົນ ແລະ ບໍ່ມີ ຄວາມ ໝາຍເພື່ອສັ່ງ ໃຫ້ທ້າວ ໄຈ ໄປຢືນຢູ່ແຈຫ້ອງ ແລ້ວປິ່ນໜ້າເຂົ້າຝາ. ຢູ່ໃນສາກທີ 2 , ຄູ ເລັກ ດູຖູກດູແຄນ ທ້າວ ໄຈ ດ້ວຍການເຍາະເຍີ້ຍ "ຄູເດົາໄດ້ວ່າມີຜູ້ໃດ ຜູ້ໜຶ່ງບໍ່ສາ ມາດຈື່ ຈຳກົດ ລະບຽບຢູ່ໃນທີ່ນີ້". ທ່ານ ຄິດວ່າທ້າວໄຈ ມີຄວາມຮູ້ສຶກແນວໃດ ພາຍຫຼັງນາງ ຄູ ເລັກແລະ ຫົວໜ້າໂຮງຮຽນເວົ້າຮ້າຍອອກໄປ?

ເຖິງຢ່າງໃດກໍດີ, **ສາກທີ 2 ແລະ ທີ 3** , ມີຕົວຢ່າງຂອງສະພາບການໃນທາງບວກ ລະຫວ່າງ ຄູ ເລັກ ແລtະ ທ້າວ ໄຈ . ຢູ່ໃນສາກທີ 2 , ນາງ ຄູ ເລັກ ຍ່າງເຂົ້າຫ້ອງຮຽນ ແລະໃຫ້ນັກຮຽນ ມິດງຽບລົງ ແລະ ກ່ຳບອກເຫດຜົນວ່າເປັນຫຍັງ (ຍ້ອນວ່າເລີ່ມຕົ້ນບົດຮຽນ ວິຊາ ຄະນິດສາດ ແລະ ທຸກໆຄົນ ມີຄວາມ ຈຳເປັນຈະຕ້ອງຟັງຢ່າງຈິດຈໍ່). ຄຳຕອບຕໍ່ກັບຄຳເຫັນ ຂອງຫົວໜ້າໂຮງຮຽນ, ຄູເລັກຕັ້ງຄຳຖາມຄູມີຄວາມກັງວົນວ່າເປັນ ຫຍັງຫົວໜ້າໂຮງຮຽນ ຈຶ່ງເວົ້າ ແນວນັ້ນ? " ຄຳຖາມ ຂໍ້ນີ້ຊ່ອຍໃຫ້ ທ້າວ ໄຈ ຄົ້ນຄິດ ກ່ຽວກັບເຫດຜົນສຳລັບການກະ ທຳຂອງ

ຫົວໜ້າໂຮງຮຽນ ແລະຄິ້ນຄິດວ່າ ການປະພຶດຂອງລາວອາດ ເຮັດໃຫ້ຫົວໜ້າໂຮງຮຽນ, ຄູ ເລັກ ແລະເພື່ອນຂອງລາວ ມີອາລົມເສຍແນວໃດ. ຄູ ເລັກ ກ້ຶກຫົວ ສະແດງໃຫ້ທ້າວ ໄຈ ເຫັນວ່າ ລາວຕອບຖືກຕ້ອງກ່ຽວກັບ ເວລາເໝາະສົມ ທີ່ຈະເວົ້າລົມກັບໝູ່ເພື່ອນ. ນາງຄູ ເລັກ ກໍ່ໄດ້ ໃຫ້ກຳລັງໃຈການ ປະພຶດຂອງທ້າວໄຈ ໂດຍໃຫ້ໂອກາດແກ່ລາວໄດ້ຕອບຄຳຕອບ ວິຊາຄະນິດ ສາດ ທີ່ຖືກຕ້ອງ ແບບງ່າຍໆ ແລະ ຄູ ເລັກ ກໍ່ຍ້ອງຍໍທ້າວ ໄຈ ແລະ ກໍຍິ້ມ. ການກະທຳອັນນີ້ ບອກທ້າວໄຈ ໃຫ້ຮູ້ວ່າ ຄູ ເລັກ ກໍຍັງພໍໃຈທ້າວ ໄຈ ຢູ່. ມັນແມ່ນການປະພຶດຂອງທ້າວໄຈ ທີ່ເປັນ ບັນຫາ ບໍ່ແມ່ນຕົວ ທ້າວໄຈ ເອງ.

ຢູ່ໃນສາກທີ 3, ຄູ ເລັກ ໃຊ້ວິທີການແບບອ່ອນໂຍນໃນການຈັດການກັບການປະພຶດ ຂອງທ້າວ ໄຈ. ຄູໄດ້ໃຫ້ທາງເລືອກແກ່ ທ້າວ ໄຈ ໃນການບັນຊາການປະພຶດຂອງລາວ. ອັນນີ້ ໄດ້ໃຫ້ໂອກາດແກ່ທ້າວໄຈໃຫ້ມີຄວາມຮັບຜິດຊອບ ຕໍ່ການປະພຶດຂອງລາວເອງ ແລະ ຈະມີຫຍັງ ເກີດ ຂຶ້ນໃນຂັ້ນຕໍ່ໄປ.

ຫລັກການ 7 ຢ່າງສຳລັບປະຕິບັດວິໄນແບບສ້າງສັນຕໍ່ເດັກນັກຮຽນ.

1. ເຄົາລົບນັບຖືກຽດສັກສີຂອງເດັກນັກຮຽນ.
2. ສ້າງພຶດຕິກຳຮັກແພງສັງຄົມ, ມີວິໄນໃນຕົວເອງ ແລະ ນິໄສດີ.
3. ໃຫ້ເດັກມີສ່ວນຮ່ວມຢ່າງຕັ້ງໜ້າສູງສຸດ.
4. ເຄົາລົບນັບຖືຄວາມຕ້ອງການທີ່ຈຳເປັນດ້ານການພັດທະນາຂອງເດັກ ແລະ ຄຸນນະ ພາບ ຊີວິດ .
5. ເຄົາລົບນັບຖືຄວາມກະຕືລືລົ້ນ ແລະ ຄວາມຄິດເຫັນກ່ຽວກັບຊີວິດຂອງເດັກ.
6. ຮັບປະກັນຄວາມຍຸຕິທຳ (ໄດ້ຮັບຄວາມສະເໝີພາບ ແລະ ເປັນທຳ ແລະ ບໍ່ມີການຈຳ ແນກ) ແລະ ຄວາມຖືກຕ້ອງ.
7. ສົ່ງເສີມຄວາມສາມັກຄີເປັນປຶກແຜ່ນ.
8.

2.2 ບາດກ້າວຂອງການປະຕິບັດລະບຽບວິໄນ/ສຶກສາອົບຮົມແບບສ້າງສັນ.

ໃນຂະນະທີ່ການລົງໂທດ ເປັນການກະທຳຢ່າງດຽວ, ການປະຕິບັດວິໄນແບບສ້າງສັນ ແມ່ນຂະ ບວນການທີ່ມີ 4 ບາດກ້າວທີ່ມີການຈັດຕັ້ງ ແລະ ຊຸມເຊີຍພຶດຕິກຳທີ່ເໝາະສົມ ຊຶ່ງຈະສະ ເໜີຕໍ່ໄປນີ້:

1. **ພຶດຕິກຳ/ການປະພຶດທີ່ເໝາະສົມຖືກພັນລະນາດ້ວຍຄຳວ່າ:**
   "ກະລຸນາໃຫ້ທຸກໆຄົນມິດງຽບລົງແດ່".
2. **ໃຫ້ເຫດຜົນອັນຈະແຈ້ງ** "ພວກເຮົາຈະເລີ່ມຕົ້ນຮຽນບົດຮຽນ ວິຊາຄະນິດສາດ ແລະທຸກຄົນ ຈຳເປັນຕ້ອງຟັງຢ່າງຈິດຈໍ່" ອັນນີ້ມີຄວາມໝາຍວ່າ ການມິດງຽບລົງຢ່າງໄວ ຈະສະແດງ

ໃຫ້ເຫັນ ເຖິງການເຄົາລົບນັບຖືຜູ້ອື່ນ. *ນັ້ນເປັນຕົວຢ່າງອັນດີຂອງການປະຕິບັດຕໍ່ຜູ້ອື່ນ ຄືກັນກັບ ທ່ານ ຢາກ ໃຫ້ຜູ້ອື່ນປະຕິບັດຕໍ່ຕົນເອງ.*

3. **ຮຽກຮ້ອງໃຫ້ມີການຍອມຮັບຮູ້**
   "ພວກນ້ອງຮູ້ບໍ່ວ່າເປັນຫຍັງການມິດງຽບຈຶ່ງມີຄວາມສຳຄັນ?" ຫຼື ຢູ່ໃນກໍລະນີຂອງ ທ້າວ ໄຈ"ພວກເຮົາທັງໝົດສາມາດເວົ້າລົມກັນເວລາ ໃດຈຶ່ງຈະບໍ່ລົບກວນຜູ້ອື່ນ ແລະ ບໍ່ລົບ ກວນ ໂອກາດການຮຽນເອົາບົດຮຽນ".
4. **ເສີມຂະຫຍາຍພຶດຕິກຳທີ່ຖືກຕ້ອງ**. ການປະສົບຕາກັນ, ງຶກຫົວ, ຍິ້ມ, ໃຫ້ເວລາຫຼິ້ນເພີ່ມ 5 ນາທີ ໃນຕອນທ້າຍຂອງມື້ຮຽນ, ໃຫ້ຄະແນນເພີ່ມພິເສດ, ສະເໜີຜົນສຳເລັດ ຂອງການ ຮຽນ ຢູ່ຕໍ່ໜ້າ ໝູ່ໃນຫ້ອງ ຫຼື ໂຮງຮຽນ (ການຍອມຮັບຮູ້ຂອງສັງຄົມເປັນ ການຍ້ອງຍໍ ທີ່ສຳຄັນທີ່ສຸດ). ເມື່ອເວລາ ມີການນຳໃຊ້ ການຍ້ອງຍໍຊົມເຊີຍ ຄວນເຮັດທັນທີທັນໃດ ແລະ ເຮັດນ້ອຍໆ, ເຮັດໃຫ້ມີຄວາມ ອີ່ມເອີບໃຈ.

ຂະບວນການນີ້ແມ່ນມີປະສິດທິຜົນສຳລັບເດັກນັກຮຽນເປັນລາຍບຸກຄົນ. ຍິ່ງໄປກວ່ານັ້ນ, ສຳລັບ ທ່ານ ທີ່ສິດສອນຢູ່ໃນຫ້ອງຮຽນ ທີ່ມີນັກຮຽນຈຳນວນຫຼາຍ, ມັນຍັງສາມາດມີປະສິດທິ ຜົນສຳລັບຫຼາຍໆກຸ່ມ ນັກຮຽນ. "ກົນລະຍຸດ" ດັ່ງກ່າວ ແມ່ນເຮັດໃຫ້ນັກຮຽນ ມີຄວາມຮູ້ສຶກ ວ່າເຂົາ ເຈົ້າເປັນ "ທີມຜູ້ຊະນະ(ກໍຄືໝົດທັ້ງຫ້ອງ) ແລະ ສັນລະເສີນຄວາມພະຍາຍາມ ຂອງແຕ່ ລະ ຄົນ ໃນການເປັນສະມາຊິກທີມງານທີ່ດີ.

ສິ່ງທີ່ຄວນຈື່ຈຳໄວ້: ໃຫ້ນັກຮຽນ ເຮັດສິ່ງທີ່ຖືກ ຕ້ອງແລ້ວຍ້ອງຍໍຊົມເຊີຍເຂົາເຈົ້າ ໃນທັນທີ ທັນ ໃດ. ອັນນີ້ຄືໃຈກາງ ຫຼື ແກ່ນສານຂອງການປະຕິບັດລະບຽບວິໄນແບບສ້າງສັນ.

ຂໍ້ສັງເກດ. ການປະຕິບັດວິໄນແບບສ້າງສັນສາມາດຫຼົ້ມເຫຼວໄດ້ຖ້າຫາກວ່າ:

1. ນັກຮຽນ ຫຼືໝົດທັ້ງຫ້ອງຮຽນບໍ່ໄດ້ຖືກຍ້ອງຍໍຊົມເຊີຍໂດຍທັນທີ ທັນເວລາ.
2. ຄວນເນັ້ນໃສ່ວຽກກິດຈະກຳຫຼາຍກວ່າເນັ້ນໃສ່ການປະພຶດ, ດັ່ງຕົວຢ່າງ "ຈະເປັນການດີ ຖ້າພວກ ເຈົ້າງຽບປາກໄວ້ ແລະ ເຊົາລົມກັນ". ເຊິ່ງມັນກົງກັນຂ້າມກັບການໃຊ້ ປະໂຫຍກ ທີ່ວ່າ "ຈະເປັນການດີທີ່ສຸດ ຖ້າພວກນ້ອງຄິດເຫັນໃຈຄົນອື່ນ ແລະ ມິດງຽບລົງ ໂດຍທັນທີ"
3. ການເນັ້ນໜັກຍັງສືບຕໍ່ເນັ້ນໃສ່ໃນສິ່ງທີ່ນັກຮຽນ ກຳລັງເຮັດຜິດ ຫຼາຍກວ່າສິ່ງທີ່ເຮັດຖືກ.

ໃນການນຳໃຊ້ການ ປະຕິບັດວິໄນແບບສ້າງສັນນັ້ນ, ໃຫ້ພະຍາຍາມຄິດໄວ້ຢູ່ໃນໃຈໃນອັດ ຕາສ່ວນ 4 ຕໍ່ 1 . ໃຫ້ນັກຮຽນ ຜູ້ໜຶ່ງ ຫຼື ໝົດຫ້ອງເຮັດສິ່ງໃດໜຶ່ງຖືກ 4 ເທື່ອ ຕໍ່ໜຶ່ງເທື່ອທີ່ເຮັດຜິດ. ໃຫ້ເຮັດຢ່າງເປັນປົກກະຕິ.ໂດຍການນຳໃຊ້ສັດສ່ວນສີ່ຕໍ່ໜຶ່ງໄປຕະຫຼອດ, ທ່ານ ຈະສະ ແດງໃຫ້ນັກ ຮຽນຂອງ ທ່ານ ເຫັນວ່າ ທ່ານ ໄດ້ເອົາຈິງເອົາຈັງກ່ຽວກັບການໃຫ້ນັກຮຽນ ເຮັດສິ່ງ ໜຶ່ງ ທີ່ຖືກຕ້ອງ ແລະ ຊົມເຊີຍທັນທີທັນໃດ. ຖ້າຢາກເຫັນວ່າ ທ່ານ ບັນລຸເຖິງສັດສ່ວນນີ້ ໃຫ້ເຮັດການບັນທຶກ

ໃນຕອນທ້າຍຂອງການສອນແຕ່ລະໄລຍະ ຫຼື ແຕ່ລະມື້. ໃຫ້ຄິດຄືນວ່າມີຈຳນວນເທົ່າໃດ ທີ່ນັກຮຽນເຮັດໄດ້ດີໂດຍປຽບທຽບໃສ່ຈຳນວນ ຄັ້ງທີ່ນັກຮຽນ ເຮັດສິ່ງໃດສິ່ງໜຶ່ງຜິດ. ທ່ານ ສາມາດບອກນັກຮຽນ ຫຼື ຜູ້ຊ່ວຍຄູຕິດຕາມ ທ່ານ ຈົນວ່າການຍ້ອງຍໍສັນລະເສີນຈະກາຍເປັນ ກິດຈະວັດປະຈຳວັນ ແລະ ການຕຳນິວິຈານກາຍເປັນສິ່ງທີ່ມີໜ້ອຍທີ່ສຸດ.

ຄູທີ່ນຳໃຊ້ການປະຕິບັດລະບຽບວິໄນແບບສ້າງສັນຈະມີຄວາມເຊື່ອໝັ້ນໃນຄວາມສາມາດຂອງ ນັກຮຽນຂອງຕົນ ແລະ ສື່ສານກັນດ້ວຍຄວາມຮັກແພງ ແລະ ເຄົາລົບນັບຖືນັກຮຽນ. ເມື່ອເວລາຄູມີຄວາມຕັ້ງໃຈ ທີ່ຈະສັງເກດນັກຮຽນ ແລະ ຕອບສະໜອງ ໃນແນວທາງ ທີ່ເປັນການຊຸກຍູ້ການປະພຶດທີ່ດີ, ຄູຈະເປັນຜູ້ຊ່ວຍນັນຮຽນ ໃຫ້ກາຍເປັນຜູ້ມີຄວາມຮັບຜິດຊອບຕໍ່ການປະພຶດຂອງຕົນເອງ ແລະ ເຂົາກໍຈະ ຫຼຸດຜ່ອນການປະພຶດຜິດລົງ.

ກິດຈະກຳການຄົ້ນຄິດຢ້ອນກັບ: ການຮຽນຮູ້ ແລະການນຳໃຊ້ບົດຮຽນທີ່ມີລັກສະນະສ້າງສັນ.

ມີໂອກາດຫຼາຍໆຢ່າງທີ່ເກີດຂຶ້ນຢູ່ໂຮງຮຽນໃນແຕ່ລະວັນທີ່ເຮັດໃຫ້ຄູ ແລະ ນັກຮຽນມີການພົວພັນຊຶ່ງກັນ ແລະ ກັນໃນທາງບວກ. ໃຫ້ຄຳນຶງເບິ່ງສະພາບການທີ່ຜ່ານມາໃນໄລຍະມໍ່ໆນີ້ ໃນເປັນບ່ອນທີ່ທ່ານ ແລະ ນັກຮຽນຜູ້ໜຶ່ງຂອງ ທ່ານ ທີ່ໄດ້ມີການພົວພັນທີ່ດີຕໍ່ກັນ ແລະ ກັນ, ອາດແມ່ນໃນຊ່ວງໄລຍະເວລາທີ່ມີການສອນກັນເປັນລາຍບຸກຄົນກໍໄດ້.ໃຫ້ທ່ານພັນລະນາປະສົບການຂອງທ່ານໃສ່ຊ່ອງຫວ່າງຂອງຕາຕະລາງຂ້າງລຸ່ມນີ້. ທ່ານສາມາດນຳໃຊ້ຂໍ້ມູນຂ່າວສານເຫຼົ່ານີ້ ເພື່ອເຮັດວຽກຮ່ວມກັບນັກຮຽນ ຜູ້ອື່ນໆ ໃຫ້ດີຂຶ້ນ ແລະ ຫລີກລ້ຽງການນຳໃຊ້ການໃສ່ວິໄນດ້ານລົບໄດ້ບໍ່?

2.3 ການຫຼີກລ້ຽງຄວາມສັບສົນໃນການປະຕິບັດລະບຽບວິໄນ.

ຢູ່ໃນພາກນີ້ໄດ້ເວົ້າເຖິງຄວາມຫຍຸ້ງຍາກສັບສົນ ໃນການປະຕິບັດວິໄນຊຶ່ງຕ້ອງໄດ້ຕັດສິນໃຈວ່າ ຈະຄວບຄຸມການປະພຶດຂອງນັກຮຽນ ເພື່ອປະໂຫຍດຂອງ ທ່ານ ຫຼື ເພື່ອການພັດທະນາການປະພຶດຂອງ ນັກຮຽນ ເພື່ອຜົນປະໂຫຍດຂອງເຂົາເຈົ້າ. ສະພາບຄວາມສັບສົນນີ້ ເກີດຂຶ້ນບົນແນວຄວາມຄິດທີ່ຜິດໂດຍຄຶດວ່າການລົງໂທດ ແລະ ການໃສ່ວິໄນມີຄວາມໝາຍຄືກັນ, ຊຶ່ງການກະທຳທີ່ດຳເນີນການສຳລັບ ແຕ່ລະກໍລະນີ ຈຶ່ງເປັນແບບດຽວກັນ ແລະ ຜົນໄດ້ຮັບກໍເປັນແບບດຽວກັນ. ເພື່ອຫລີກລ້ຽງຄວາມ ຫຍຸ້ງຍາກສັບສົນດັ່ງກ່າວນີ້ ແລະ ລົບລ້າງຄວາມບໍ່ເຂົ້າໃຈ, ພວກເຮົາໄດ້ຮຽນຮູ້ແລ້ວກ່ຽວກັບຄວາມແຕກຕ່າງລະຫວ່າງການລົງໂທດ ແລະ ການປະຕິບັດວິໄນ, ຄວາມເປັນທຳມະຊາດ ແລະ ຜົນໄດ້ຮັບທີ່ຕາມມາຂອງການລົງໂທດ ແລະ ການປະຕິບັດວິໄນແບບສ້າງສັນ ແລະ ຂະບວນການປະຕິບັດວິໄນແບບສ້າງສັນ. ຢູ່ຂ້າງລຸ່ມນີ້ເປັນກິດຈະກຳອັນສຸດທ້າຍ ເພື່ອທົດສອບຄວາມຮູ້ຂອງທ່ານກ່ຽວກັບຄວາມແຕກຕ່າງ ລະຫວ່າງການປະຕິບັດວິໄນດ້ານບວກ ແລະ ດ້ານລົບ.

ກິດຈະກຳປະຕິບັດ: ນີ້ເປັນການປະຕິບັດວິໄນໃນທາງບວກ ຫຼື ທາງລົບ.

ຢູ່ໃນຕາຕະລາງຂ້າງລຸ່ມນີ້ ອັນໃດເປັນການປະຕິບັດວິໄນດ້ານບວກ ແລະ ອັນໃດເປັນ ການປະຕິບັດວິໄນດ້ານລົບ?. ໃຫ້ທ່ານໝາຍ (√) ໃສ່ຖັນໃດທີ່ມີຄວາມເໝາະສົມ. ໃນຂັ້ນຕໍ່ໄປ, ໃຫ້ກວດເບິ່ງ ຄະແນນຢູ່ໃນຖັນສຸດທ້າຍສຳລັບການກະທຳທີ່ ທ່ານໄດ້ນຳໃຊ້ ຫລື ທ່ານ ອາດຈະໃຊ້ ເພື່ອກວດແກ້ການ ປະພຶດຜິດຂອງນັກຮຽນ. ທ່ານ ຕ້ອງໝາຍດ້ວຍຄວາມຊື່ສັດ!

	ດ້ານ ບວກ (√)	ດ້ານ ລົບ (√)	ທ່ານເຄີຍໄດ້ໃຊ້ ການກະທຳນີ້ບໍ່? ໄດ້ໃຊ້/ບໍ່ໄດ້ໃຊ້
1. ເຮັດໃຫ້ນັກຮຽນຕັ້ງໃຈ ກ່ອນທີ່ທ່ານຈະເລີ້ມສອນ			
2. ນຳໃຊ້ການສອນແບບໂດຍກົງ (ບອກນັກຮຽນຢ່າງຄັກແນ່ວ່າ ຈະມີຫຍັງເກີດຂຶ້ນ)			
3. ສ້າງສົມມຸດຕິຖານ			
4. ເຮັດການກ່າວຫາໂດຍບໍ່ມີຂໍ້ພິສູດ			
5. ລຸກຂຶ້ນແລ້ວຍ່າງອ້ອມໄປໃນຫ້ອງຮຽນ			
6. ໃຊ້ກຳລັງທາງດ້ານຮ່າງກາຍ			
7. ໃຊ້ຄຳສັ່ງບັນຊາ			
8. ເຮັດໃນສິ່ງທີ່ທ່ານຢາກໃຫ້ນັກຮຽນເຮັດຕາມ(ເປັນແບບຢ່າງ)			
9. ສະໜູບສັງລວມກ່ຽວກັບການປະພຶດຂອງນັກຮຽນ			
10.ເຮັດການສົມທຽບເດັກຜູ້ໜຶ່ງກັບເດັກຜູ້ອື່ນໃຫ້ທຸກຄົນຮູ້ຈັກ			
11. ສ້າງຄວາມອຸດົມສົມບູນດ້ານສະພາບແວດລ້ອມຫ້ອງຮຽນ			
12. ຄາດຄະເນບັນຫາລ່ວງໜ້າ			
13. ຢືນຢັນວ່າທ່ານຖືກຕ້ອງ ແລະ ປະພຶດຕົນຢູ່ເໜືອກວ່າ			
14. ສ້າງຕັ້ງກົດລະບຽບທີ່ຈະແຈ້ງ ແລະສະມ່ຳສະເໝີ			

ຄຳຕອບ: ການປະພຶດຂໍ້ 1, 2, 5, 8, 11, 12 ແລະ 14 ເປັນແນວທາງບວກ ການປະພຶດຂໍ້ 3, 4, 6, 7, 9, 10, ແລະ 13 ເປັນແນວທາງລົບ. ທ່ານຈະໃຫ້ຄະແນນແນວໃດ? ມີວິທີການທາງບວກ ແລະ ທາງລົບ ຈັກອັນ ທີ່ທ່ານເຄີຍໄດ້ໃຊ້ ?

ບົດທີ 2

ການສ້າງສາຍພົວພັນທີ່ດີລະຫວ່າງຄູ - ນັກຮຽນ

1. ພື້ນຖານຂອງການພົວພັນທີ່ດີລະຫວ່າງຄູ - ນັກຮຽນ

ບັນດາຄູສອນຜູ້ທີ່ນຳໃຊ້ການປະຕິບັດວິໄນ ແບບສ້າງສັນນັ້ນຈະໃຫ້ຄວາມນັບຖື, ຖະນຸຖະໜອມແລະຊ່ອຍເຫຼືອນັກຮຽນ ຂອງເຂົາເຈົ້າ. ພວກເພິ່ນ *ຈະເຂົ້າໃຈວ່າ* ເປັນຫຍັງນັກຮຽນຈຶ່ງປະພຶດດີ ຫຼື ບໍ່ປະພຶດດີ ຄື ດັ່ງທີ່ເຂົາສະແດງອອກ ກໍຄືເດັກນັກຮຽນ *ເຫັນ/ເບິ່ງ* ຕົວຄູເອງຢ່າງໃດ ຊຶ່ງອາດເປັນສາເຫດຕໍ່ການປະພຶດຜິດ. ພວກເພິ່ນຍັງໄດ້ເນັ້ນໜັກໃສ່ ຄວາມອາດສາມາດຂອງ ນັກຮຽນ ແລະ ສະພາບຊີວິດ ການເປັນຢູ່ຂອງເຂົາອີກ. ຄວາມຄາດຫວັງ ຂອງຄູຕໍ່ກັບເດັກ ແມ່ນມີລັກສະນະຕົວຈິງ, ຖືເອົາໃຈນັກຮຽນ ມາໃສ່ໃຈຕົນເອງ ແລະ ບໍ່ແມ່ນເນັ້ນໃສ່ວ່າ ເດັກ ຄວນ ຈະເປັນແນວໃດ.ຄູສອນເຂົ້າໃຈວ່າການປະພຶດຜິດ ແມ່ນເຫດການ ສຳລັບການ ຮຽນຮູ້ ແບບ ສ້າງ ສັນສຳລັບທັງຕົວຂອງນັກຮຽນ ແລະ ຄູສອນ ແລະ ມັນແມ່ນພາກສ່ວນທີ່ສຳຄັນ ແລະ ມີລັກ ສະນະເປັນທຳມະຊາດຂອງພັດທະນາການຂອງເດັກ, ບໍ່ຄວນ ຖື ວ່າມັນເປັນການຂົ່ມຂູ່ ອຳນາດ ຂອງຄູສອນ.

ໂດຍການສ້າງສາຍພົວພັນອັນດີບົນພື້ນຖານຄວາມເຂົ້າໃຈ ແລະຄວາມເຫັນໃຈ, ນັກຮຽນ ຈະກັບ ກາຍ ມາເຊື່ອໝັ້ນຄູສອນຂອງເຂົາ ແລະໃຫ້ຄຸນຄ່າສູງການອະນຸມັດເຫັນດີຂອງຄູ. ເມື່ອນັກ ຮຽນຕອບ ສະໜອງຕໍ່ຄວາມເປັນທຳມະຊາດທີ່ເປັນບວກຂອງການພົວພັນ ແລະ ການປະ ຕິບັດ ວິໄນທີ່ສະເໜີຕົ້ນ ສະເໜີປາຍແລ້ວ, ເຫດການຂອງການປະພຶດແນວບໍ່ດີກໍຫລຸດລົງ ແລະ ຄຸນນະ ພາບຂອງການພົວພັນ ກໍຈະປັບປຸງດີຂຶ້ນຕໍ່ໄປເລື້ອຍໆ. ຮອດຕອນທ້າຍນີ້, ຄູສອນທີ່ດີທີ່ສຸດ ແມ່ນ ຜູ້ທີ່ມີບົດບາດເປັນແບບຢ່າງ ທີ່ດີ ແລະ ການເປັນແບບຢ່າງຂອງຄູດັ່ງກ່າວນັ້ນ ເດັກກໍເພິ່ງພໍໃຈ ຢາກກ່າຍເອົາແບບຢ່າງນັ້ນດ້ວຍ.

2. ເປັນຫຍັງເດັກຈຶ່ງມີພຶດຕິກຳສະແດງອອກໃຫ້ເຫັນຄືແນວນັ້ນ?

2.1 ການສ້າງທາງເລືອກ

ສາວຄູ ສາມີນາ ເປັນຄູສອນວິຊາວິທະຍາສາດຫ້ອງ ປ.4 ມີບັນຫາປະຈຳກັບທ້າວ ຮາລີ. ເຂົາເຈົ້າ ຈະບໍ່ລົງຮອຍກັນມາຕະຫລອດ. ອັນໃດກໍຕາມທີ່ສາວຄູ ສາມີນາ ຕ້ອງການໃຫ້ທ້າວ ຮາລີ ປະຕິບັດ ເຊັ່ນ: ໃຫ້ມາໂຮງຮຽນທັນເວລາ, ໃຫ້ເຮັດວຽກບ້ານທຸກໆມື້. ທ້າວ ຮາລີ ກໍບໍ່ຄ່ອຍ ຈະປະຕິບັດຕາມ. ສິ່ງທີ່ຄູ ສາມີນາ ບໍ່ສາມາດມອງເຫັນ ຫຼືສຳນຶກໄດ້ນັ້ນ, ໃນທ້າຍສຸດຄູຜູ້ອື່ນໄດ້ ພົບເຫັນວ່າຄູ ສາມີນາ ມີແຕ່ບອກສິ່ງທີ່ນາງຕ້ອງການໃຫ້ ທ້າວ ຮາລີ ເຮັດແບບເປັນຄຳຖາມ. ຕົວຢ່າງ “ຮາລີ ກະລຸນາ ໃຫ້ນ້ອງ ມາໂຮງຮຽນໃຫ້ທັນເວລາໄດ້ບໍ່? ” ແລະ ທ້າວ ຮາລີ ກໍມັກຈະ ບອກສະເໝີວ່າ “ ບໍ່ ”

ບໍ່ມີຜູ້ໃດແລະບໍ່ມີສະພາບການໃດສາມາດເຮັດໃຫ້ການປະພຶດ ຂອງເດັກເປັນໄປຕາມທິດທາງອັນແນ່ນອນໄດ້. ສຳລັບສາວຄູສາມີນາ ນາງໄດ້ຂໍຮ້ອງໃຫ້ ທ້າວ ຮາລີ ຮັບເອົາການປະພຶດທີ່ດີແຕ່ວ່າຖືກທ້າວຮາລີປະຕິເສດ ການຂໍຮ້ອງນັ້ນເລື້ອຍໆ. ຍ້ອນຫຍັງ? ການປະພຶດແມ່ນອີງຕາມທາງເລືອກ ແລະ ນັກຮຽນຂອງ ທ່ານ ກໍເລືອກເອົາການປະພຶດອັນໃດທີ່ເຂົາເຈົ້າຕ້ອງການເລືອກ. ທ່ານ ບໍ່ສາມາດບັງຄັບ ເຂົາ ຊຶ່ງເປັນເຫດໃຫ້ຮູ້ວ່າວ່າ ເປັນຫຍັງການ ລົງໂທດ ຈຶ່ງໃຊ້ການບໍ່ໄດ້ ໃນທີ່ສຸດ. ເຖິງຢ່າງໃດກໍດີ, ຄືດັ່ງຄູ ຂອງທ້າວ ເຣມອນ ໄດ້ຮຽນຮູ້ຢູ່ພາກທີ່ຜ່ານມານັ້ນ, ທ່ານ ມີອຳນາດ ຫຼື ອິດທິພົນຕໍ່ການຕັດສິນໃຈ ຂອງນັກຮຽນກ່ຽວກັບສິ່ງທີ່ຈະປະພຶດຄືແນວໃດ, ແຕ່ວ່າການປ່ຽນແປງຕ້ອງເລີ່ມຕົ້ນຈາກທ່ານຊຶ່ງເປັນຄູສອນ. ສຳລັບຄູສອນຂອງ ເຣມອນ ນາງຈຳເປັນຕ້ອງຮຽນຮູ້ສິ່ງທີ່ຈະປະຕິບັດກັບທ້າວ ເຣມອນ ແລະ ກັບນັກຮຽນຂອງນາງຜູ້ອື່ນໆ ເຊັ່ນດຽວກັນເພື່ອໃຫ້ລາວຢາກເລືອກການປະພຶດທີ່ເໝາະສົມ ແລະ ຍອມປະຕິບັດຕາມລະບຽບຂອງຫ້ອງຮຽນ. ທ່ານ ກໍປະເຊີນໜ້າກັບສິ່ງທ້າທ້າຍແບບດຽວກັນ. ພາລະບົດບາດຂອງ ທ່ານ ແມ່ນຕ້ອງລະບຸ/ກຳນົດເຫດຜົນທີ່ເດັກ ການເລືອກປະພຶດອັນເລວຮ້າຍໃຫ້ໄດ້ ແລະ ສ້າງຍຸດທະສາດ ເພື່ອຊ່ອຍເຫຼືອນັກຮຽນໃຫ້ເລືອກການປະພຶດທີ່ດີກວ່າ.

ກິດຈະກຳເພື່ອປະຕິບັດ: ນັກຮຽນຜູ້ດຽວກັນ, ການປະພຶດແຕກຕ່າງກັນ.

ໃຫ້ທ່ານເລືອກເອົານັກຮຽນຜູ້ໜຶ່ງຢູ່ໃນຫ້ອງຂອງ ທ່ານທີ່ມີພຶດຕິກຳລົບກວນ ແລະ ສ້າງຄວາມລຳຄານຕໍ່ທ່ານ.ໃຫ້ສັງເກດເບິ່ງນັກຮຽນ ຜູ້ນີ້ຢ່າງປົກກະຕິໃນອາທິດໜຶ່ງ, ພິເສດເວລາຢູ່ນອກ ຫ້ອງຮຽນຂອງ ທ່ານ. ນັກຮຽນ ຜູ້ນັ້ນປະພຶດຢູ່ໃນຫ້ອງຮຽນອື່ນ, ກັບຄູສອນຜູ້ອື່ນ ຫຼື ກັບນັກຮຽນຜູ້ອື່ນ ແບບດຽວກັນກັບທີ່ລາວເຮັດຢູ່ໃນຫ້ອງຂອງ ທ່ານບໍ? ຖ້າຫາກລາວປະພຶດແຕກຕ່າງໃນເວລາຢູ່ໃນສະຖານທີ່ຫຼືສະຖານະການອື່ນໆ ໃນໂຮງຮຽນ, ທ່ານ ຄິດວ່າມັນເປັນຍ້ອນຫຍັງ ລາວຈຶ່ງເລືອກປະພຶດທາງລົບຄືແນວນັ້ນ ຢູ່ໃນຫ້ອງຮຽນຂອງທ່ານ? ໃຫ້ທ່ານເປີກສານຳຄູສອນ ຜູ້ທີ່ບໍ່ມີບັນຫາກັບການປະພຶດຂອງນັກຮຽນຜູ້ນັ້ນ . ພວກເພິ່ນເຮັດອັນໃດທີ່ ແຕກຕ່າງຈາກທ່ານ? ທ່ານໄດ້ໃຊ້ປະ ໂຫຍກເພື່ອຂໍໃຫ້ປະຕິບັດເປັນຄຳຖາມ (ຄືດັ່ງສາວຄູ ສາມີນາຂ້າງເທິງບໍ?). ທ່ານເຄີຍ ໄດ້ໃສ່ໂທດນັກຮຽນ ຜູ້ທີ່ບໍ່ຕ້ອງ ການມາໂຮງຮຽນບໍ? ຄູສອນຜູ້ອື່ນໆ ໄດ້ໃຫ້ໂອກາດແກ່ນັກຮຽນຜູ້ນັ້ນ ແລະ ໄດ້ໃຫ້ລາວຈັດການແກ້ໄຂ ກັບຜົນທີ່ຕາມມາພາຍຫຼັງບໍ? ທ່ານ ສາມາດທີ່ຈະເຮັດວຽກເພື່ອຊ່ອຍລາວໃຫ້ກາຍເປັນຜູ້ມີຄວາມຮັບຜິດຊອບໃນການປະພຶດຂອງຕົນ ໃນທາງບວກໄດ້ຢ່າງໃດ?.

2.2 ຄວາມຕ້ອງການຢາກເປັນເຈົ້າຂອງ

ຄວາມຢາກເປັນເຈົ້າຂອງແມ່ນຄວາມຕ້ອງການພື້ນຖານ ບໍ່ວ່າຈະເປັນເດັກ ຫຼື ຜູ້ໃຫຍ່. ນັກຮຽນມີຄວາມຕ້ອງການຄວາມເພິ່ງພໍໃຈ 3 ຢ່າງ ເພື່ອໃຫ້ປະສົບກັບຄວາມຮູ້ສຶກຂອງຄວາມເປັນເຈົ້າຂອງ:

- ❖ ນັກຮຽນຈຳເປັນຕ້ອງຮູ້ສຶກວ່າມີຄວາມສາມາດ(Capable) ເພື່ອສຳເລັດວຽກງານ/ກິດຈະກຳ ທີ່ຖືກມອບໝາຍຕາມຄວາມຕ້ອງການຂອງຫ້ອງຮຽນ ແລະ ໂຮງຮຽນ;
- ❖ ນັກຮຽນຈຳເປັນຕ້ອງຮູ້ສຶກວ່າເຂົາມີຄວາມສາມາດຕິດຕໍ່ພົວພັນ (Connect) ໄດ້ຢ່າງສຳເລັດຜົນກັບຄູສອນ ແລະ ເພື່ອນຮ່ວມຫ້ອງຮຽນ;
- ❖ ນັກຮຽນຈຳເປັນຕ້ອງຮູ້ວ່າເຂົາໄດ້ປະກອບສ່ວນ (Contribute) ໃຫ້ແກ່ກຸ່ມຢູ່ໃນແນວທາງໃດໜຶ່ງທີ່ສຳຄັນ.

ປັດໄຈ 3 ຢ່າງທີ່ກະທົບໃສ່ຄວາມອາດສາມາດຂອງນັກຮຽນ ເພື່ອສ້າງຄວາມເພິ່ງພໍໃຈສາມຢ່າງຂ້າງເທິງນັ້ນ, ມັນຮຽກຮ້ອງຕ້ອງການ ໃຫ້ມີການກະທຳຈາກພາກສ່ວນຂອງທ່ານດັ່ງຕໍ່ໄປນີ້:

1. ຄຸນນະພາບຂອງການພົວພັນລະຫວ່າງ ຄູສອນ-ນັກຮຽນ, ໂດຍອີງໃສ່ຄວາມໄວ້ວາງໃຈ, ເຄົາລົບ ນັບຖືຊຶ່ງກັນ ແລະ ກັນ ແລະ ຄວາມເຂົ້າໃຈ (ບໍ່ມີຄວາມຢ້ານກົວ);
2. ກຳລັງແຮງຂອງບັນຍາກາດໃນຫ້ອງຮຽນເພື່ອຄວາມສຳເລັດ (ຕົວຢ່າງ: ນັກຮຽນທຸກຄົນມີຄວາມຮູ້ສຶກວ່າເຂົາໄດ້ຖືກບັນຈຸຢູ່ໃນນັ້ນ, ເຂົາຮູ້ສຶກສາວ່າເປັນຜູ້ມີຄຸນຄ່າ ແລະ ເຂົາເຈົ້າ ສາມາດເຮັດວຽກຮ່ວມກັນຢ່າງສະໜານສາມັກຄີ ແລະ ມີປະສິດທິຜົນ.
3. ຄວາມເໝາະສົມຂອງໂຄງສ້າງຫ້ອງຮຽນ (ຈະຄຸ້ມຄອງ-ບໍລິຫານແນວໃດ).

3. ເປັນຫຍັງເດັກຈຶ່ງປະພຶດຕົນໃນທາງທີ່ບໍ່ເໝາະສົມ

ທ່ານບໍ່ຕ້ອງເປັນຫ່ວງ, ນັກຮຽນຂອງທ່ານບໍ່ໄດ້ສ້າງຊຸດພຶດຕິກຳ ທີ່ບໍ່ເໝາະສົມໄວ້ດ້ວຍຄວາມຕັ້ງໃຈ. ທີ່ຈິງແລ້ວ, ເດັກທີ່ປະພຶດບໍ່ເໝະສົມມັກຈະມີເຫດຜົນໃດໜຶ່ງ. ບັນດາເຫດຜົນທົ່ວ ໄປທີ່ສຳຄັນທີ່ສຸດທີ່ ເຊື່ອວ່າເປັນຂະນວນໃຫ້ ເກີດການປະພຶດທີ່ບໍ່ເໝາະສົມມີດັ່ງນີ້:

- ❖ ວຽກ/ບົດຮຽນອາດງ່າຍໂພດ ຫຼືຍາກໂພດສຳລັບນັກຮຽນ.
- ❖ ວຽກ/ບົດຮຽນບໍ່ເປັນໜ້າສົນໃຈ ແລະນັກຮຽນມີຄວາມເບື່ອໜ່າຍ.
- ❖ ວິທີການສິດສອນອາດບໍ່ສອດຄ່ອງ ຫຼືບໍ່ຖືກກັບວິທີການຮຽນຮູ້ຂອງນັກຮຽນ.
- ❖ ນັກຮຽນອາດບໍ່ທັນໄດ້ຮັບຄວາມກຽມ ພ້ອມ.
- ❖ ຄາດໝາຍບໍ່ຈະແຈ້ງ ຫຼື ບໍ່ມີເຫດຜົນ.
- ❖ ນັກຮຽນມີທັກສະດ້ານສັງຄົມໜ້ອຍ, ບໍ່ສາມາດສື່ສານໄດ້ດີກັບທ່ານ ຫຼື ກັບຜູ້ອື່ນ ຫຼື ມີຄວາມພາກພູມໃຈໃນຕົນເອງຕ່ຳ.

ນອກຈາກເຫດຜົນຂ້າງເທິງນີ້ແລ້ວ, ຍັງເຊື່ອອີກວ່ານັກຮຽນປະພຶດໃນທາງທີ່ບໍ່ເໝາະສົມແມ່ນ ເພື່ອບັນລຸ 4 ເປົ້າໝາຍທີ່ຕ້ອງການ ຄື:

1. ຄວາມສົນໃຈ.
2. ອຳນາດ.

3. ການແກ້ແຄ້ນ.
4. ການຫລີກລ້ຽງຄວາມຫຼົ້ມເຫລວ ຫຼື ຄວາມບໍ່ມີພຽງພໍ.

3.1 ການຊອກຫາຄວາມສົນໃຈ (ຄວາມເອົາໃຈໃສ່)

ສຳລັບນັກຮຽນທີ່ຮຽກຮ້ອງຄວາມສົນໃຈແບບເລື້ອຍເປື່ອຍຢູ່ປະຈຳ, ທ່ານຄູອາດຈະຢາກ ຮ້າຍ, ຕຳນິ, ໃຫ້ສົນບົນ(ຈ້ຳໆເຂົ້າໜົມ ຫຼື ອື່ນໆ), ຫຼື ໃຊ້ເຕັກນິກການປະຕິບັດວິໄນທາງລົບ. ແຕ່ ຖ້າທ່ານຫາກຍັງຈື່ໄດ້ວ່າເປົ້າໝາຍຂອງນັກຮຽນ ແມ່ນເຮັດໃຫ້ຄູສົນໃຈ/ເອົາໃຈໃສ່, ທ່ານຈະເຫັນ ໄດ້ໂດຍງ່າຍເລີຍວ່າການດ່າວ່າຕີຕຽນ ຫຼື ໃຫ້ສົນບົນນັ້ນຈະສິ່ງເສີມ ການປະພຶດຜິດເທົ່ານັ້ນ ໃຫ້ເພີ່ມຂຶ້ນ. ຢູ່ໃນຈິດໃຈຂອງເດັກ, ຄວາມສົນໃຈຈາກຄູທີ່ມັກຮ້າຍດ່າ ແມ່ນດີກວ່າການບໍ່ສົນໃຈ/ ບໍ່ເອົາໃຈໃສ່ຫຍັງເລີຍ. ຖ້າທ່ານຈ້ອງສັງເກດເບິ່ງພຽງແຕ່ການປະພຶດ ໃນທາງທີ່ບໍ່ເໝາະສົມຂອງ ນັກຮຽນ, ນັກຮຽນກໍຈະປະພຶດໃນທາງຜິດ ເພື່ອໃຫ້ໄດ້ຄວາມສົນໃຈ.

ຕໍ່ໄປນີ້ ແມ່ນບັນດາການປະຕິບັດວິໄນແບບສ້າງສັນ ທີ່ທ່ານສາມາດນຳໃຊ້ເພື່ອເປັນ ທິດທາງ ປະຕິບັດ ຕໍ່ນັກຮຽນຜູ້ທີ່ມີການປະພຶດໃນທາງທີ່ບໍ່ເໝາະສົມເພື່ອຮຽກຮ້ອງຄວາມສົນໃຈ.

- ❖ ເຮັດໃຫ້ເຂົາເປັນຄົນດີ,ຊົມເຊີຍເຂົາ ເມື່ອເຂົາບໍ່ໄດ້ຊອກຫາຄວາມສົນໃຈ ແລະປະພຶດຜິດ.
- ❖ ໃຫ້ວາງເສັຍຕໍ່ພຶດຕິກຳເມື່ອໃດຫາກພໍເປັນໄປໄດ້ ໂດຍການໃຫ້ຄວາມສົນໃຈແນວບວກ ແກ່ເດັກໃນຊ່ວງເວລາສະໜຸກສະໜານ.
- ❖ ສິດສອນເຂົາເຈົ້າໃຫ້ຮູ້ວິທີຂໍຄວາມສົນໃຈ (ຕົວຢ່າງ: “ເອື້ອຍຄູ/ອາຈານກະລຸນາມາເບິ່ງ ທາງນ້ອງ/ຫຼານແດ່” ຊຶ່ງເຂົາເຈົ້າຈະຍົກມື/ເຈ້ຍບັດຄຳຂຶ້ນ ເມື່ອເວລາມີຄຳຖາມ).
- ❖ ຈ້ຶ້ງຕາເບິ່ງດ້ວຍຄວາມບໍ່ພໍໃຈ ແຕ່ບໍ່ປາກ.
- ❖ ໃຫ້ໄປຢືນຢູ່ໃກ້ເຂົາແທນທີ່ຈະຢູ່ໄກ (ຖ້າຫາກທ່ານຢູ່ຂ້າງໆເຂົາ, ເຂົາຈະບໍ່ມີຄວາມຈຳ ເປັນສະແດງພຶດຕິກຳຮຽກຮ້ອງຄວາມສົນໃຈ) .
- ❖ ມີເປົ້າໝາຍ-ຍຸດຕິ-ປະຕິບັດ; ໝາຍຄວາມວ່າ ວາງເປົ້າໝາຍນັກຮຽນ ໂດຍຂຽນລາຍຊື່ ໄວ້, ແລ້ວລະບຸ/ກຳນົດພຶດຕິກຳທີ່ຈະໃຫ້ຢຸດຕິ, ບອກໃຫ້ນັກຮຽນຮູ້ວ່າອັນໃດ ທີ່ຕ້ອງເຮັດ ໃນຂະນະນັ້ນ, ປ່ອຍໃຫ້ລາວຕັດສິນໃຈກ່ຽວກັບສິ່ງທີ່ລາວຈະເຮັດໃນຊ່ວງຕໍ່ໄປ ແລະ ຜົນ ທີ່ ຕາມມາຈາກການເຮັດສິ່ງດັ່ງກ່າວ.
- ❖ ໃຫ້ເຮັດສິ່ງທີ່ບໍ່ໄດ້ຄາດໝາຍໄວ້ເຊັ່ນ: ມອດໄຟ,ຫຼົ້ນສຽງດົນຕີ, ຜ່ອນສຽງຂອງ ທ່ານ ໃຫ້ ຄ່ອຍລົງ, ປ່ຽນສຽງຂອງທ່ານ, ເວົ້າໃສ່ຝາ.
- ❖ ເຂົ້າຂັດຈັງຫວະນັກຮຽນເຊັ່ນ ຕັ້ງຄຳຖາມໂດຍກົງ,ຮ້ອງຂໍໃຫ້ເຮັດສິ່ງໃດໜຶ່ງ, ໃຫ້ໂອກາດ ເລືອກ, ປ່ຽນກິດຈະກຳ.

3.2 ຫຼັກການທົ່ວໄປ ເພື່ອຮັບມືກັບນັກຮຽນທີ່ຮຽກຮ້ອງຄວາມສົນໃຈແມ່ນ:

ບໍ່ໃຫ້ຄວາມສົນໃຈຕາມການຮຽກຮ້ອງ, ເຖິງວ່າຈະເປັນພຶດຕິກຳທີ່ມີປະໂຫຍດ. ຊ່ອຍເຫຼືອນັກຮຽນໃຫ້ກາຍເປັນຜູ້ມີສະຕິກະຕຸ້ນດ້ວຍຕົນເອງ. ໃຫ້ຄວາມສົນໃຈໃນແນວທາງທີ່ເຂົາບໍ່ໄດ້ຄາດຄິດ. ເຮັດໃຫ້ເຂົາເປັນ "ຄົນດີ"

ກ. ອຳນາດ

ເດັກຈະພະຍາຍາມຢູ່ສະເໝີເພື່ອຢາກສະແດງອຳນາດ. ທ້າວເຣມອນເປັນ ຕົວຢ່າງໜຶ່ງກ່ຽວກັບດ້ານນີ້. ມີນັກຮຽນຈຳນວນໜຶ່ງ ມີຄວາມຮູ້ສຶກວ່າ ເຂົາຈະເປັນພາກສ່ວນໜຶ່ງທີ່ສຳຄັນຂອງຫ້ອງຮຽນໄດ້ ກໍຕໍ່ເມື່ອເຂົາໄດ້ສະແດງ. ນັກຮຽນທີ່ຊອກຫາອຳນາດຈະມີຄວາມຮູ້ສຶກວ່າເຂົາຈະເປັນຜູ້ສຳຄັນ ໄດ້ກໍຕໍ່ເມື່ອເຂົາໄດ້ທ້າທາຍອຳນາດຂອງທ່ານ, ຕ້ານກົດລະບຽບ ແລະ ບໍ່ປະຕິບັດຕາມຄຳສັ່ງສອນ. ເຂົາເຈົ້າມີຄວາມເຊື່ອຢ່າງຜິດພາດທີ່ວ່າເຂົາມີຄວາມເປັນເຈົ້າຂອງໃນຫ້ອງຮຽນກໍຕໍ່ເມື່ອເຂົາຢູ່ໃນການຄວບຄຸມເທົ່ານັ້ນ.ເຂົາເຈົ້າຈະທ້າທາຍບໍ່ເກງກົວ ທ່ານ ເພື່ອເບິ່ງວ່າທ່ານຈະຖືກກົດດັນຂະໜາດໃດ, ຫຼື ເຂົາຈະເອົາໃຈທ່ານພໍສົມຄວນເມື່ອເຂົາຮູ້ສຶກວ່າ ທ່ານ ບໍ່ຕ້ອງການທີ່ຈະສືບຕໍ່ສູ້ກັບເຂົາ.

ການຕອບໂຕ້ໂດຍທຳມະຊາດຂອງພວກເຮົາ ເຊັ່ນ ຢູ່ໃນໄລຍະການຕໍ່ສູ້ອຳນາດຈະມີຄວາມຮູ້ສຶກຖືກກໍ່ກວນ ແລະ ໃຈຮ້າຍ. ຄວາມພະຍາຍາມແກ້ໄຂ ແມ່ນຢຸດເຊົາການຕໍ່ສູ້ນີ້ທັງໝົດໂດຍຜ່ານການນຳໃຊ້ບາງຮູບແບບການລົງໂທດທາງດ້ານຮ່າງກາຍຈຳນວນໜຶ່ງ, ແຕ່ວ່າມັນຈະໃຊ້ໄດ້ພຽງແຕ່ຜ່ອນຜັນເທົ່ານັ້ນ. ໃນຊ່ວງເວລາມີການຕໍ່ສູ້ ເພື່ອເອົາອຳນາດນັ້ນທ່ານມີຄວາມຈຳເປັນຕ້ອງປະຕິບັດການແບບໃຈເຢັນ ຫຼື ມີຄວາມກະລຸນາ ແຕ່ຕ້ອງໝັ້ນຄົງແນ່ນອນ. ການໂອ້ລົມອາດຈະດີພຽງເລັກນ້ອຍ ແລະ ມັນຈະຊຸບລ້ຽງການຕໍ່ສູ້ເອົາອຳນາດເທົ່ານັ້ນ. ທ່ານ ຈຳເປັນຕ້ອງໄດ້ຕັດສິນໃຈວ່າ*ທ່ານຈະເຮັດອັນໃດ*, ແຕ່ບໍ່ແມ່ນສິ່ງທີ່ຈະເອົາໃຫ້ນັກຮຽນເຮັດ. ແນວທາງທົ່ວໄປເພື່ອແກ້ໄຂຈັດການກັບນັກຮຽນທີ່ຊອກຫາອຳນາດ ແມ່ນການຖອນຕົວອອກຈາກຄວາມຂັດແຍ່ງ. ໃຫ້ຈື່ຈຳໄວ້ວ່າ: ຈະມີສອງຝ່າຍເພື່ອຕໍ່ສູ້ກັນ. ໃຫ້ງຽບຕັ້ງສະຕິ, ໃຫ້ທາງເລືອກ, ປ່ອຍໃຫ້ຜົນທີ່ຕາມມາຂອງການປະພຶດຂອງນັກຮຽນເກີດຂຶ້ນ. ທ່ານ ຍັງອາດເອົາຊະນະການຮ່ວມມືຂອງເຂົາເຈົ້າດ້ວຍການຂຽນລາຍການຊ່ອຍເຫຼືອຂອງເຂົາເຈົ້າ. ຕົວຢ່າງ" ບໍ່ເປັນຫຍັງທີ່ນ້ອງມາຮອດຫ້ອງຮຽນບໍ່ທັນເວລາ. ຄູເຂົ້າໃຈ, ແຕ່ວ່ານ້ອງສາມາດຊ່ອຍຈົດບັນທຶກການມາໂຮງຮຽນຂອງນັກຮຽນໃນຫ້ອງໄດ້ບໍ່?" ແທນທີ່ຈະຊອກເອົາອຳນາດມາໃຫ້ທ່ານ, ທ່ານ ເຮັດໃຫ້ນັກຮຽນຢູ່ ໃນຖານະມີຄວາມຮັບຜິດຊອບ ແລະ ມອບອຳນາດທາງການໃຫ້ເຂົາເຈົ້າ.

ຂ. ການແກ້ແຄ້ນ.

ການຈັດການແກ້ໄຂເປົ້າໝາຍອັນຜິດພາດຂອງການແກ້ແຄ້ນຕ້ອງໃຊ້ຄວາມອົດທົນ. ນັກຮຽນຜູ້ທີ່ເຮັດໃຫ້ຜູ້ອື່ນ ແລະ ທ່ານເຈັບຈະມີຄວາມຮູ້ສຶກວ່າເຂົາຖືກເຮັດໃຫ້ເຈັບ (ຈະເປັນການ

ເຈັບທີ່ແທ້ຈິງ ຫຼື ຈິນຕະນາການເອົາກໍຕາມ) ແລະ ເຂົາຈະຕ້ອງແກ້ແຄ້ນຄືນ. ເຂົາຈະຮູ້ສຶກຖືກ ປະຕິບັດ ຢ່າງບໍ່ຍຸຕິທຳ, ຖືກ ຜ່າຍແພ້ ແລະ ບໍ່ມີຄວາມສຸກ. ສະນັ້ນ, ເຂົາເຈົ້າຈຶ່ງຊອກຫາວິທີແກ້ ແຄ້ນດ້ວຍຄວາມຕັ້ງໃຈ ຫຼື ໂດຍບໍ່ຮູ້ເທົ່າເຖິງການ. ການແກ້ແຄ້ນສາມາດເກີດຂຶ້ນທາງດ້ານ ຮ່າງກາຍ, ວາຈາ ຫຼື ແບບຢູ່ເສີຍໆບໍ່ໄດ້ເຮັດອັນໃດ. ມັນອາດສາມາດເຮັດແບບງຽບໆ ເຊັ່ນ ໂດຍ ຜ່ານການເບິ່ງ ແລະ ສະແດງທ່າທາງແບບກຽດຊັງ. ນັກຮຽນຍັງອາດສາມາດທີ່ຈະຊອກຫາວິທີແກ້ ແຄ້ນ ທ່ານ ໂດຍທາງອ້ອມ ຄື ກັນ ເຊັ່ນ ສັບໝາກກອກ ນັກຮຽນຜູ້ອື່ນ ຫຼື ຂຽນອັນໃດອັນໜຶ່ງ ໃສ່ໂຕະ.

ເມື່ອເວລານັກຮຽນຖືກປ່ອຍໃຫ້ແກ້ແຄ້ນ, ເຂົາຈະສ້າງວົງຈອນຂອງຄວາມເຈັບປວດທີ່ພົວ ພັນກັບຫຼາຍຄົນດ້ວຍການເຮັດໃຫ້ບາດເຈັບ ແລະ ຖືກບາດເຈັບ.ໃຫ້ຈື່ຈຳໄວ້ວ່ານັກຮຽນຜູ້ຊອກ ຫາການແກ້ແຄ້ນຈະສ້າງຄວາມຫຍຸ້ງຍາກໜັກໃຈ ແລະ ມີຄວາມທໍ້ຖອຍຢ່າງເລິກເຊິ່ງ. ເພື່ອຢຸດ ຕິວິຖີແຫ່ງການແກ້ແຄ້ນ ທ່ານ ຄວນຫຼີກລ້ຽງຄວາມຮູ້ສຶກເຈັບປວດ ແລະ ທ່ານ ກໍ່ບໍ່ຄວນແກ້ໝັດ ຕໍ່ລໍ້ຕໍ່ຖຽງ. ຢ່າໄດ້ຊອກຫາການແກ້ແຄ້ນໃຫ້ຕົນເອງ. ໃນທາງກັບກັນ, ໃຫ້ພະຍາຍາມສ້າງການ ພົວພັນແບບເອົາໃຈໃສ່ດູແລກັນ, ສ້າງການພົວພັນທີ່ໄດ້ວາງໃຈກັນກັບນັກຮຽນ ໄປຄຽງຄູ່ກັບການ ປັບປຸງຄວາມພາກພູມໃຈໃນຕົນເອງ. ສິ່ງນີ້ສາມາດເຮັດໄດ້ງ່າຍໆ ໂດຍຈັດວາງນັກຮຽນໃຫ້ຢູ່ໃນ ສະພາວະທີ່ເຂົາເຈົ້າບໍ່ສາມາດຫຼີ້ນເຫລວໄດ້. ເມື່ອເວລານັກຮຽນມີແນວຄິດຂອງຕົນດີຂຶ້ນ, ໜ້ອຍ ທີ່ສຸດທີ່ເຂົາຈະປະພຶດແນວຜິດ ແລະ ຫາທາງແກ້ແຄ້ນ. ພ້ອມກັນນີ້ ກໍໃຫ້ສອນນັກຮຽນທຸກຄົນ ໃຫ້ຮູ້ຈັກວິທີສະແດງຄວາມຮູ້ສຶກຂອງຕົນຢ່າງເໝາະສົມ, ແທນທີ່ຈະເຮັດການແກ້ແຄ້ນ ຍ້ອນ ໄດ້ຮັບຄວາມບາດເຈັບທາງຮ່າງກາຍ ຫຼື ຈິດໃຈ, ສອນນັກຮຽນໃຫ້ “ເວົ້າ ອອກມາ” ເພື່ອໃຫ້ໄດ້ ບອກເຊິ່ງກັນ ແລະ ກັນວ່າ ເຂົາເຈົ້າເຈັບແສບພຽງໃດ ແລະ ພະຍາຍາມກຳນົດສາຍເຫດ ແລະ ວິທີຫລີກລ້ຽງມັນໃນອະນາຄົດ.

ຄ. ການຫລີກລ້ຽງຄວາມຫຼີ້ນເຫລວ ຫຼື ຄວາມຂາດເຂີນ(ປົມດ້ອຍ)

ມີນັກຮຽນຈຳນວນໜຶ່ງມີຄວາມຢ້ານກົວຕໍ່ຄວາມຫຼີ້ນເຫລວ ຫຼື ມີຄວາມຮູ້ສຶກວ່າຕົນເອງມີປົມ ດ້ອຍ ແລະ ບໍ່ສາມາດເຮັດໄດ້ຕາມຄາດໝາຍຂອງຕົນເອງຂອງພໍ່ແມ່ ແລະ ຂອງຄູສອນ. ຄວາມ ຮູ້ສຶກມີປົມດ້ອຍນີ້ ຈະເປັນການຫຼົບຫຼີກຂອງເດັກຜູ້ທີ່ມີຄວາມທໍ້ຖອຍ. ເວົ້າອີກທາງໜຶ່ງ, ເມື່ອເຂົາ ຮູ້ສຶກບໍ່ດີ ເຂົາກໍຈະກຳທຳແນວບໍ່ດີ. ເຂົາເຈົ້າຈະບໍ່ພະຍາຍາມເຮັດດີ ຢູ່ໃນຫ້ອງຮຽນຂອງ ທ່ານ ຖ້າຫາກເຂົາຄິດວ່າຕົນເອງເປັນຄົນໂງ່. ເພື່ອທົດແທນຄວາມຮູ້ສຶກຂອງຄວາມມີປົມດ້ອຍ, ພວກ ເຂົາອາດເລືອກພຶດຕິກຳແບບຖອນຕົວ ເຊິ່ງຈະເຮັດໃຫ້ເຂົາເກີດມີປົມດ້ອຍ: “ຂ້ອຍບໍ່ສາມາດ ແກ້ໂຈດຄະນິດສາດນີ້ໄດ້”, “ຂ້ອຍຮຽນວິຊາວິທະຍາສາດບໍ່ໄດ້ດີ”, “ປຶ້ມຫົວນີ້ຍາກຫຼາຍສຳລັບ ຂ້ອຍ” ຍຸດທະວິທີຂອງການໃສ່ວິໄນດ້ານລົບ ເຊັ່ນ ການເຢາะເຢີ້ຍ ແລະ ເວົ້າແດກດັນ (“ເຈົ້າເຮັດ ໃຫ້ດີກວ່ານີ້ ບໍ່ໄດ້ຫວ໋າ?”), ຈະເຮັດໃຫ້ເດັກເຫຼົ່ານີ້ຮູ້ສຶກດ້ອຍຄ່າລົງ. ອາດມີຫຼາຍທາງທີ່ເປັນໄປ ໄດ້ ສຳລັບນັກຮຽນຜູ້ທີ່ມີຄວາມຮູ້ສຶກວ່າມີປົມດ້ອຍ, ບໍ່ເດັ່ນບໍ່ດັງ, ຫຍາບຄາຍອາດຈະເວົ້າອວດດີ,

ຄຸຍໄມ້ ຫຼື ຕີກັນ. ເຂົາອາດຈະກັບມາຂົ່ມເຫັງກໍ່ກວນ ໂດຍເຮັດໃຫ້ນັກຮຽນຜູ້ອື່ນໆ ມີຄວາມຮູ້ສຶກຢ້ານກົວ ແລະ ມີປົມດ້ອຍ.

ເມື່ອເວລານັກຮຽນຂອງທ່ານຮູ້ສຶກມີປົມດ້ອຍ ທ່ານ ຈະມີພາລະທີ່ຫຍຸ້ງຍາກ. ໃຫ້ເລີ່ມຕົ້ນຈາກບ່ອນທີ່ເຂົາເປັນຢູ່ (ບໍ່ແມ່ນເລີ້ມຈາກສິ່ງທີ່ເຮົາຄິດວ່າເຂົາຈະເປັນ), ໃຫ້ສ້າງຄາດໝາຍທີ່ມີລັກສະນະຕົວຈິງ, ລົບລ້າງການຕຳນິຕິຕຽນວຽກງານ/ການຮຽນຂອງເຂົາທັງໝົດ, ໃຫ້ຊຸກຍູ້ສິ່ງເສີມຄວາມພະຍາຍາມອັນເລັກໆນ້ອຍໆຂອງເຂົາ ແລະ ທັງໝົດນີ້ຢ່າໄດ້ສົງສານເຂົາ. ທ່ານຕ້ອງບູລະນະປັບປຸງຄວາມເຊື່ອສັດທາຢູ່ໃນຕົວຂອງເຂົາເອງ ແລະ ຊຸກຍູ້ສິ່ງເສີມເຂົາ ດ້ວຍການສັນ ລະເສີນຊົມເຊີຍຄວາມສຳເລັດທີ່ເຂົາບັນລຸ ບໍ່ວ່າມັນຈະເລື່ອງເລັກໆນ້ອຍໆກໍຕາມ. ໂດຍເຈດຕະນາໃຫ້ມີການຈັດກຸ່ມກິດຈະກຳງ່າຍໆ ເພື່ອໃຫ້ເຂົາບັນລຸຜົນສຳເລັດ ແລະ ຊອກຫາໂອກາດໃຫ້ໄດ້ຍົກຍ້ອງ ກ່ຽວກັບການປະພຶດ ແລະ ຄວາມພະຍາຍາມເຮັດສິ່ງທີ່ດີຂອງເຂົາ. ໃຫ້ຈື່ຈຳໄວ້ວ່າ ເດັກບໍ່ແມ່ນຜູ້ໃຫຍ່ຈຳລອງເປັນຮູບຮ່າງນ້ອຍໆທີ່ມີຄຸນພິນິດອ່ອນ; ພວກເຂົາເຮັດຜິດ ຍ້ອນວ່າເຂົາກຳລັງຮຽນຮູ້ຢູ່ປະຈຳ.

4. ການຮຽນຮູ້ກ່ຽວກັບນັກຮຽນຂອງທ່ານ

ການສ້າງຄວາມໄວ້ວາງໃຈ ແລະ ການພົວພັນແບບດູແລເບິ່ງແຍງລະຫວ່າງ ທ່ານ ແລະ ນັກຮຽນຂອງທ່ານນັ້ນ, ອັນໜຶ່ງຈະເປັນການສົ່ງເສີມພຶດຕິກຳທີ່ດີ ແລະ ປ້ອງກັນການປະພຶດທີ່ບໍ່ເໝາະສົມເຊິ່ງສາມາດເປັນເລື່ອງທ້າທາຍຫຍຸ້ງຍາກ, ແຕ່ວ່າມັນກໍສາມາດໃຫ້ລາງວັນຕອບແທນ ເຊັ່ນດຽວກັນ ເຊັ່ນ ມັນເຮັດໃຫ້ການສິດສອນຂອງ ທ່ານ ມີຄວາມສະໜຸກສະໜານ ແລະ ປັບປຸງການຮ່ຳຮຽນຂອງນັກຮຽນໃຫ້ດີຂຶ້ນ. ຜົນສຳເລັດໃນທາງບວກຂອງນັກຮຽນ ຈະສະທ້ອນໃຫ້ເຫັນວ່າທ່ານເຮັດວຽກໄດ້ດີຊ່ຳໃດ ແລະ ນັກຮຽນຂອງທ່ານ ເຫັນທ່ານເປັນ “ແບບຢ່າງ” ທີ່ດີຊ່ຳໃດ.

ບໍ່ວ່າທ່ານຈະມີນັກຮຽນຈຳນວນຫຼາຍຢູ່ໃນຫ້ອງຮຽນຂອງທ່ານ ຫຼື ຫຼາຍກວ່າຈຳນວນ ທີ່ຈະຄຸ້ມຄອງໄດ້ກໍຕາມ, ຄວາມທ້າທາຍຂອງ ທ່ານ ແມ່ນຈະຕ້ອງຮຽນຮູ້ກ່ຽວກັບນັກຮຽນແຕ່ລະຄົນໃຫ້ຫຼາຍເທົ່າທີ່ ທ່ານຈະສາມາດເຮັດໄດ້. ສຳລັບຄູທີ່ສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍ, ໃນຂັ້ນທຳອິດໃຫ້ໃຊ້ຄວາມພະຍາຍາມສຸມໃສ່ນັກຮຽນຈຳນວນໜ້ອຍ ທີ່ຕ້ອງການຄວາມເອົາໃຈໃສ່ພິເສດກ່ອນ, ບໍ່ວ່າຈະເປັນຍ້ອນວ່າເຂົາກຳລັງປະພຶດຜິດໆໃນປັດຈຸບັນ ຫຼື ຍ້ອນທ່ານ ສົງໄສວ່າສະພາບສ່ວນຕົວ ແລະ ຄອບ ຄົວອາດເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ການປະພຶດຜິດໆ. ໃຫ້ສຸມຄວາມພະຍາຍາມຂອງທ່ານ ໃສ່ຄວາມເຂົ້າໃຈວ່າເຂົາເຫັນຕົນເອງຄືແນວໃດ ກໍຄື ປັດໄຈພາຍນອກອາດຢູ່ໃນຄອບຄົວກໍເປັນໄດ້ ທີ່ອາດມີຜົນກະທົບຕໍ່ການປະພຶດຂອງເຂົາເຈົ້າ.

ໃຫ້ຈື່ຈຳໄວ້ວ່າ: ນັກຮຽນແຕ່ລະຄົນຈະມີຄວາມເປັນສ່ວນບຸກຄົນ ຫຼື ມີຈຸດພິເສດສ່ວນຕົວໃຜມັນ. ນັກຮຽນແຕ່ລະຄົນທີ່ເຂົ້າມາຈະມີປະຫວັດເລື່ອງລາວ ທີ່ ແຕກຕ່າງກັນ, ມີວິທີການຕອບສະໜອງ ແລະ ຕອບຮັບການຮຽນຮູ້ໂລກແບບແຕກຕ່າງກັນ ແລະ ມີຄວາມໃຝ່ຝັນສຳລັບອະນາຄົດແຕກ

ຕ່າງກັນ. ໂດຍໃຊ້ເວລາເພື່ອຮຽນຮູ້ກ່ຽວກັບນັກຮຽນຂອງ ທ່ານ ໃນຖານະເປັນລາຍບຸກຄົນ ແລະ ໂດຍໃຫ້ຮູ້ຈັກຄອບຄົວຂອງເຂົາເຈົ້າ ຈະສະແດງໃຫ້ເຫັນວ່າ ທ່ານ ເອົາໃຈໃສ່ດູແລເຂົາ ແລະ ນັບຖືຄວາມເປັນເອກະລັກຂອງ ເຂົາ.

ຢູ່ໃນສະພາບແວດລ້ອມທີ່ນັບຖືເຊິ່ງກັນ ແລະ ກັນ, ນັກຮຽນທຸກຄົນຈະມີຄວາມຮູ້ສຶກປອດໄພ ແລະ ມີຄຸນຄ່າ. ຄູສອນມີຄວາມເປັນມິດໄມຕີ ແລະ ເປີດໃຈກັບນັກຮຽນ ແຕ່ວ່າຄູສອນຈະເປັນ ຜູ້ໃຫຍ່ສະເໝີ. ການໃຫ້ຄວາມເອົາໃຈໃສ່ຕໍ່ການຮຽນຂອງນັກຮຽນຢ່າງມີການຄົ້ນຄິດ ແມ່ນສະ ແດງອອກໃນການເບິ່ງແຍງດູແລ ແລະ ການນັບຖື. ແທນທີ່ຈະພຽງແຕ່ຍ້ອງວ່າ “ເຮັດໄດ້ດີ ” ໃຫ້ ບອກນັກຮຽນຕື່ມໄປວ່າ ເປັນຫຍັງຈຶ່ງດີ.

ກິດຈະກຳເພື່ອປະຕິບັດ: ຂ້ອຍແມ່ນໃຜ ?

ໃນຕອນເລີ່ມຕົ້ນຂອງສົກຮຽນໃໝ່, ໃຫ້ນັກຮຽນຂຽນຕື່ມໃສ່ບັດທີ່ຄ້າຍຄືບັດທີ່ຢູ່ດ້ານລຸ່ມນີ້. ໃຫ້ນຳໃຊ້ຂໍ້ມູນຂ່າວສານ ນີ້ເພື່ອໂອ້ລົມກັບນັກຮຽນ, ພັດທະນາແຜນການສອນ ແລະ ອອກແບບ ກິດຈະກຳການຮ່ຳຮຽນ. ໃນຕອນທ້າຍຂອງພາກຮຽນທີໜຶ່ງ ບອກໃຫ້ນັກຮຽນຂຽນຕື່ມໃສ່ບັດອີກ, ແລ້ວເບິ່ງວ່າມີອັນໃດປ່ຽນແປງ, ໂດຍສະເພາະ ໃນເລື່ອງທີ່ນັກຮຽນເຊື່ອວ່າເຂົາເຮັດໄດ້ດີ ຫຼື ບໍ່ ໄດ້ດີກໍ່ຄືເມື່ອເວລາເຂົາເຈົ້າດີໃຈ ຫຼື ບໍ່ມີຄວາມສະບາຍໃຈຢູ່ໃນຫ້ອງ. ໂດຍການນຳໃຊ້ຂໍ້ມູນຂ່າວ ສານນີ້ ມີກິດຈະກຳການຮຽນອັນໃໝ່ອັນໃດ ທີ່ນັກຮຽນຂອງທ່ານສາມາດເຮັດໄດ້ ເພື່ອຈະປັບປຸງ ຄວາມໝັ້ນໃຈຂອງນັກຮຽນ ແລະ ເຮັດໃຫ້ຫ້ອງຮຽນຂອງ ທ່ານ ເປັນບ່ອນທີ່ມ່ວນຊື່ນ ໃນການ ຮ່ຳຮຽນ.

ຖ້າຫາກທ່ານແມ່ນຄູສອນທີ່ສາມາດຕິດຕາມນັກຮຽນຂອງທ່ານເປັນເວລາຫຼາຍປີ, ໃຫ້ຮັກ ສາບັດນີ້ໄວ້ໃນແຟ້ມສະສົມ ແລະ ທົບທວນເບິ່ງເພື່ອການປ່ຽນແປງ. ໃຫ້ທົບທວນແຜນການ ແລະ ກິດຈະກຳຂອງທ່ານຢ່າງສອດຄ່ອງ. ຖ້າຫາກທ່ານສອນຢູ່ໂຮງຮຽນທີ່ມີຄູສອນວິຊາແຕກຕ່າງກັນ, ກໍໃຫ້ທ່ານແລກປ່ຽນຂໍ້ມູນຂ່າວສານກັບພວກເພິ່ນ ແລະ ຊຸກຍູ້ໃຫ້ພວກເພິ່ນນຳໃຊ້ບັດນີ້ເຂົ້າໃນ ການກະກຽມບົດສອນ.

ຊື່ນັກຮຽນ:_____

ຂ້ອຍຕ້ອງການຢາກໃຫ້ເອີ້ນຂ້ອຍວ່າ: _____

ສິ່ງໜຶ່ງທີ່ທ່ານຈຳເປັນຕ້ອງຮູ້ກ່ຽວກັບຂ້ອຍແມ່ນ:_____

ຂ້ອຍຕ້ອງການຮຽນ/ເຮັດວຽກຮ່ວມກັບ:_____

ສິ່ງທີ່ຂ້ອຍຮຽນ/ເຮັດໄດ້ດີ: _____

ສິ່ງທີ່ຂ້ອຍຮຽນ/ເຮັດບໍ່ໄດ້ດີ: _____

ຂ້ອຍມີຄວາມສຸກທີ່ສຸດໃນຫ້ອງຮຽນໃນເວລາ_____

ຂ້ອຍບໍ່ມີຄວາມສະບາຍໃຈຢູ່ໃນຫ້ອງຮຽນໃນເວລາ :_____

ກິດຈະກຳເພື່ອປະຕິບັດ: ເວລາເພື່ອແລກປ່ຽນຄວາມຄິດເຫັນ.

ໃຫ້ຈັດເວລາຕ່າງຫາກຈັກ 10 ຫາ 15 ນາທີໃນມື້ໜຶ່ງ ຫຼື ຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດ ເພື່ອໃຫ້ນັກຮຽນຂອງທ່ານ ໄດ້ລວມຈຸລວມໝ່ວຍແລກປ່ຽນຄວາມຮູ້ສຶກ, ມີອັນໃດອ່ອນ ແລະ ມີ ອັນໃດດີທີ່ເກີດຂຶ້ນໃນຊີວິດຂອງເຂົາ. ກຸ່ມໃດໜຶ່ງສາມາດເລືອກ ເພື່ອປ່ຽນຂໍ້ມູນຂ່າວສານທີ່ເຂົາ ຮູ້ສຶກວ່າມີຄວາມສຳຄັນຮ່ວມກັບຄູສອນ ຫຼື ກັບຫ້ອງຮຽນ.

ກິດຈະກຳແລກປ່ຽນທີ່ຄ້າຍຄືກັນອີກຢ່າງໜຶ່ງ ສາມາດບັນຈຸເອົາການບອກນັກຮຽນໃຫ້ ເຮັດການບັນທຶກປະຈຳວັນສ່ວນຕົວ ແລະ ເອົາພາກສ່ວນໃດພາກສ່ວນໜຶ່ງມາແລກປ່ຽນກັບທ່ານ ແລະ ກັບນັກຮຽນຜູ້ອື່ນໆ. ໃນການສິດສອນການຂຽນບົດຄວາມ, ທັດແຕ່ງບອກໃຫ້ນັກຮຽນຂຽນ ສິ່ງທີ່ເກີດຂຶ້ນໃນຊີວິດຂອງເຂົາເຈົ້າ ນັບທັງສິ່ງທີ່ດີ ແລະ ສິ່ງບໍ່ດີ.

ກິດຈະກຳເພື່ອປະຕິບັດ: ໃຫ້ຂຽນຕື່ມໃສ່ບ່ອນເປົ່າຫວ່າງ.

ໃຫ້ສ້າງແບບຟອມ ຫຼືແຜ່ນເຈ້ຍທີ່ໃຫ້ມີບ່ອນຂຽນຕື່ມໃສ່ບ່ອນເປົ່າຫວ່າງຄືດັ່ງນີ້:

" ພາຍຫຼັງເລີກໂຮງຮຽນສ່ວນຫຼາຍຂ້ອຍ_____

ອາຫານທີ່ຂ້ອຍມັກທີ່ສຸດແມ່ນ_____

ກິດຈະກຳທີ່ຂ້ອຍມັກທີ່ສຸດແມ່ນ_____

ວິຊາທີ່ຂ້ອຍມັກຮຽນທີ່ສຸດຢູ່ໃນໂຮງຮຽນແມ່ນ_____

ຂ້ອຍຕ້ອງການຢາກເປັນຄືກັບ_____

ຂ້ອຍຢາກເປັນ_____ເມື່ອເວລາຂ້ອຍຮຽນຈົບຈາກໂຮງຮຽນແລ້ວ ".

ຢູ່ໃນຫ້ອງຮຽນບ່ອນທີ່ມີນັກຮຽນໃໝ່ຈຳນວນຫຼາຍ, ທ່ານສາມາດໃຊ້ກິດຈະກຳນີ້ໃນຕອນ ເລີ່ມຕົ້ນສົກຮຽນ ຊຶ່ງເປັນໂອກາດເຮັດໃຫ້ນັກຮຽນໄດ້ຮູ້ຊຶ່ງກັນ ແລະ ກັນ,ໂດຍສະເພາະຢູ່ໃນຫ້ອງ ຮຽນທີ່ມີນັກຮຽນມາຈາກພື້ນເພ/ພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ. ໃຫ້ທ່ານຂີດຖັນເພີ່ມ ເຕີມໃສ່ທາງກ້ຳຂວາຂອງໃບເຈ້ຍທີ່ມີຂໍ້ມູນນີ້ ແຕ່ປະໃຫ້ມັນເປົ່າວ່າງໄວ້. ພາຍຫຼັງນັກຮຽນຂຽນຕື່ມ ໃສ່ບ່ອນເປົ່າຫວ່າງແລ້ວ ໃຫ້ເຂົາເຈົ້າຊອກຫານັກຮຽນຜູ້ອື່ນໆ ທີ່ມີຄຳຕອບແບບດຽວກັນແລ້ວ ຂຽນຊື່ນັກຮຽນແຕ່ລະຄົນໃສ່ຖັນທີ່ຂີດໄວ້.

5. ເຂົ້າໃຈສະພາບຄວາມເປັນຈິງ(ບໍລິບົດ) ການດຳລົງຊີວິດຂອງນັກຮຽນ

ບໍ່ແມ່ນແຕ່ພວກເຮົາເທົ່ານັ້ນທີ່ເປັນຜູ້ມີອິດທິພົນຕໍ່ການປະພຶດຂອງເດັກ. ເດັກນັກຮຽນແຕ່ ລະຄົນ ແມ່ນຜົນຜະລິດຂອງສະພາບແວດລ້ອມຂອງການຮຽນຮູ້ທັງໝົດຂອງເຂົາ. ສະພາບແວດ ລ້ອມນີ້ ບໍ່ແມ່ນຈະລວມເອົາແຕ່ສະເພາະຫ້ອງຮຽນ ແລະ ໂຮງຮຽນຂອງທ່ານເທົ່ານັ້ນ, ແຕ່ຍັງກວມ ລວມເອົາຕົວເດັກນັກຮຽນ, ຄອບຄົວຂອງເດັກນັກຮຽນ ແລະ ຊຸມຊົນຂອງເຂົາອີກ. ຕົວຢ່າງ: ທ່ານ ເຄີຍໄດ້ຍິນປະໂຫຍກເຫຼົ່ານີ້ເລື້ອຍໆບໍ່ "ລາວເຮັດຄືກັນກັບພໍ່ຂອງລາວ" ຫຼື "ລາວເຮັດຄືກັນກັບ

ອ້າຍຂອງລາວ"?. ຄວາມເຂົ້າໃຈສະພາບແວດລ້ອມອັນກວ້າງຂວາງນີ້ ອາດເປັນສິ່ງທ້າທາຍໃໝ່ ສຳລັບພວກທ່ານຫຼາຍໆຄົນ, ພິເສດສຳລັບຜູ້ທີ່ເຄີຍເຮັດວຽກແຕ່ຢູ່ພາຍໃນຂອບເຂດຈຳກັດຂອງ ຫ້ອງຮຽນ ແລະໂຮງຮຽນເທົ່ານັ້ນ.

ວິທີປະພຶດ ຫຼື ພຶດຕິກຳຂອງນັກຮຽນຢູ່ໃນຫ້ອງຮຽນຂອງທ່ານອາດຈະສະທ້ອນໃຫ້ເຫັນ ຂໍ້ຈຳກັດຢູ່ໃນຕົວເຂົາເອງ, ຢູ່ໃນຊີວິດຄອບຄົວ ຫຼື ການຮັບມືກັບສະພາວະທີ່ມີຄວາມຫຍຸ້ງຍາກ ທີ່ຢູ່ໃນ ຫຼື ນອກໂຮງຮຽນ. ພວກເຮົາມີຄວາມຈຳເປັນທີ່ຕ້ອງມີຄວາມລະອຽດຖີ່ຖ້ວນ ໃນການຕີ ຄວາມໝາຍພຶດຕິກຳຂອງເດັກນັກຮຽນ. ສິ່ງທີ່ພວກເຮົາຄິດວ່າມັນແມ່ນການປະພຶດທີ່ບໍ່ເໝາະ ສົມ ອາດຈະບໍ່ແມ່ນບັນຫາກ່ຽວກັບລະບຽບວິໄນຈັກໜ້ອຍເລີຍ; ຕົວຢ່າງ, ເດັກອາດຊອກຫາ ຄວາມສົນໃຈພິເສດຈາກທ່ານ ຍ້ອນວ່າເຂົາບໍ່ມີສິ່ງນັ້ນຢູ່ໃນເຮືອນຂອງເຂົາ. ມັນອາດເປັນປະຕິ ກິລິຍາ ຫຼື ຂໍ້ຈຳກັດຂອງເດັກຕໍ່ກັບບັນຫາທີ່ມີຢູ່ເຮືອນ ຫຼື ຢູ່ບ່ອນອື່ນທີ່ນຳມາສູ່ຫ້ອງຮຽນກໍໄດ້. ດັ່ງ ນັ້ນ ມັນບໍ່ແມ່ນການປະພຶດຂອງເດັກທີ່ເປັນບັນຫາ, ມັນແມ່ນສະພາບການທີ່ເດັກໄດ້ຕົກຢູ່ໃນ ທີ່ນັ້ນ. ຂໍ້ຈຳກັດ/ຄວາມສົ້ນຫວັງ ທີ່ເຕີມເຊື້ອເພີງດ້ວຍຕົ້ນເຫດຂອງມັນ, ອາດຈະຊ່ວຍອະທິບາຍ ການປ່ຽນແປງການປະພຶດທີ່ເກີດຂຶ້ນຢ່າງກະທັນຫັນ ຢູ່ໃນນັກຮຽນຜູ້ທີ່ບໍ່ເຄີຍປະພຶດຜິດ. ໃນກໍລະ ນີໃດກໍຕາມ ຖ້າພວກເຮົາໃສ່ວິໄນເດັກຍ້ອນການປະພຶດທີ່ບໍ່ເໝາະສົມຂອງເຂົາເຈົ້າ, ພວກເຮົາ ເຮັດ "ວຽກຜິດພາດ" ພວກເຮົາອາດໂທດເດັກຍ້ອນສິ່ງໃດສິ່ງໜຶ່ງ ທີ່ບໍ່ແມ່ນຄວາມຜິດຂອງເຂົາ, ແລະ ພວກເຮົາອາດຈະຫຼົ້ງຜິດເຮັດໃຫ້ເດັກສັບສົນຫຼາຍຂຶ້ນ. ໃນກໍລະນີນີ້ ການລົງໂທດຈະບໍ່ ໄດ້ຜົນ ແລະ ມັນອາດມີຜົນເສຍຫາຍໃຫ້ແກ່ການພັດທະນາດ້ານການປະພຶດຂອງເດັກ.

ເພື່ອຊີ້ແນະການປະພຶດຂອງເດັກໄປໃນທາງບວກ ພວກເຮົາມີຄວາມຈຳເປັນທີ່ຈະຕ້ອງ ເຂົ້າໃຈສະພາບແວດລ້ອມຂອງການຮຽນຮູ້ຂອງເຂົາເຈົ້າທັງໝົດ ແລະ ປັດໄຈທີ່ອາດມີອິດທິພົນຕໍ່ ພຶດຕິກຳຂອງ ເຂົາໃນລະດັບບຸກຄົນ, ລະດັບຄອບຄົວ ແລະລະດັບຊຸມຊົນ. ເມື່ອເວລາ ເດັກມີການປະພຶດຜິດ ພວກເຮົາຈຳເປັນຕ້ອງຄຳນຶງເຖິງປັດໄຈເຫຼົ່ານີ້ ກ່ຶຄືເອົາໃຈໃສ່ເປົ້າໝາຍ 4 ຢ່າງທີ່ໄດ້ກ່າວມາກ່ອນໜ້ານີ້.

ພວກເຮົາຈຳເປັນຕ້ອງຖາມຕົວເອງວ່າ ເຂົາເຈົ້າມີຄວາມຫຍຸ້ງຍາກກັບສະພາບຫ້ອງຮຽນ ຫຼື ມີສິ່ງ ໃດສິ່ງໜຶ່ງຢູ່ນອກຫ້ອງຮຽນ ແລະ ນອກໂຮງຮຽນ ທີ່ອາດເປັນສາເຫດໃຫ້ເກີດບັນຫາ. ສຸດທ້າຍການແກ້ໄຂບັນຫາເຫຼົ່ານີ້ ບໍ່ແມ່ນຂຶ້ນກັບພວກເຮົາພຽງຜູ້ດຽວເທົ່ານັ້ນ. ພວກເຮົາຈຳເປັນ ຕ້ອງມີການຮ່ວມມືອັນສະໜິດແໜ້ນກັບພໍ່ແມ່ເດັກ, ຜູ້ນຳຊຸມຊົນ ແລະອຳນາດການປົກຄອງທ້ອງ ຖິ່ນເພື່ອກຳນົດ ແລະແກ້ໄຂສະພາບການທີ່ຫຍຸ້ງຍາກທີ່ສຸດອັນໃດໜຶ່ງທີ່ເດັກກຳລັງປະເຊີນຢູ່ ແລະ ການປະພຶດທີ່ບໍ່ເໝາະສົມຂອງເຂົາກຳລັງ ມີຜົນສະທ້ອນ.

ຕໍ່ໄປນີ້ແມ່ນບັນດາປັດໄຈຕ່າງໆ ທີ່ອາດກະທົບຕໍ່ການຢາກມາໂຮງຮຽນ ຫຼື ຜົນສຳເລັດ ຂອງນັກຮຽນ ຫຼື ການປະພຶດຂອງນັກຮຽນ ພ້ອມທັງບາງມາດຕະການ ເພື່ອແກ້ບັນຫາ ໂດຍສະ ເພາະການມີສ່ວນຮ່ວມຂອງຄອບຄົວ ແລະ ຊຸມຊົນ. ທ່ານຍັງສາມາດສົນທະນາກັບເພື່ອນກ່ຽວກັບ ປັດໄຈອື່ນໆອີກໃນໂຮງຮຽນຫ້ອງຖິ່ນຂອງທ່ານ ພ້ອມດ້ວຍມາດຕະການແກ້ໄຂ.

5.1 ເດັກນັກຮຽນ

ຈຳເປັນຕ້ອງເຮັດວຽກ. ບັນດາເດັກທີ່ມີຄວາມຮູ້ສຶກວ່າເຂົາຄວນຢູ່ບ້ານ ຫຼື ຢູ່ບ່ອນອື່ນ ເພື່ອຊ່ວຍເຫຼືອຄອບຄົວຫາລ້ຽງຊີບ ອາດບໍ່ມີຄວາມຕ້ອງການຢູ່ໃນຫ້ອງຮຽນ ແລະ ອາດໃຊ້ການປະພຶດທີ່ບໍ່ເໝາະສົມເປັນເຄື່ອງມືໃນການຫາທາງໜີໂຮງຮຽນ. ສິ່ງທີ່ເຂົາສົນໃຈແມ່ນການໃຫ້ການຊ່ວຍເຫຼືອດ່ວນແກ່ຄອບຄົວ ຂອງເຂົາຫຼາຍກວ່າຈະດູແລການສຶກສາຂອງເຂົາ ເພື່ອແກ້ໄຂບັນຫາເສຖະກິດຄອບຄົວໄລຍະຍາວໃນອະນາຄົດ. ສຳລັບຕໍ່ເດັກກຸ່ມນີ້, ມີຄວາມຈຳເປັນຈະຕ້ອງສະແດງອອກໃຫ້ເຫັນວ່າການຮຽນ ແລະ ການປະພຶດທີ່ດີຂອງເຂົາ ອາດສາມາດປັບປຸງວຽກງານໃນອະນາຄົດຂອງເຂົາເຈົ້າໄດ້ຢ່າງແທ້ຈິງ.ເຂົາເຈົ້າຍັງຕ້ອງໄດ້ຮັບໂອກາດເພື່ອມີລາຍໄດ້ ແລະ ໄດ້ຮ່ຳຮຽນໄປດ້ວຍ, ເຊັ່ນ ມີແຜນງານການເຝິກອົບຮົມທັກສະດ້ານການດຳລົງຊີບຢູ່ພາຍໃນໂຮງຮຽນ ເຊິ່ງຜະລິດພັນທີ່ເຂົາເຈົ້າຜະລິດອອກມານັ້ນ ສາມາດນຳໄປຂາຍໄດ້ ໂດຍສ່ວນກຳໄລເອົາໄປໃຫ້ເດັກ.ຍຸດທະສາດທີ່ດີ ອີກອັນໜຶ່ງ ກໍຄື ເຊີນພໍ່ແມ່ເດັກ ຫຼື ສະມາຊິກຊຸມຊົນຜູ້ທີ່ຄົນເຄົາລົບນັບຖືມີຄວາມຮ ແລະ ທັກສະສະເພາະ ໃດໜຶ່ງໃຫ້ມາເປັນວິທະຍາກອນຢູ່ໃນຫ້ອງຮຽນ. ພວກເພິ່ນສາມາດສອນເດັກກ່ຽວກັບວິຊາສະເພາະຂອງເພິ່ນ ເຊິ່ງຄວາມຮູ້ນັ້ນມັນພົວພັນກັບສິ່ງທີ່ນັກຮຽນກຳລັງຮຽນຢູ່ໃນຫ້ອງຮຽນ ແລະ ມີຄຸນຄ່າ ທາງການສຶກສາຢູ່ໃນໄລຍະຍາວ.

ນອກຈາກນີ້, ເດັກບາງຄົນ ແລະ ເດັກຍິງ ອາດຈະມີວຽກເຮືອນຫຼາຍຢ່າງທີ່ຕ້ອງເຮັດກ່ອນໄປໂຮງຮຽນ ເຊັ່ນ ເອົານ້ອງ, ອະນາໄມເຮືອນຊານ, ເກັບຟືນ, ແຕ່ງກິນ ແລະ ລ້ຽງເກືອສັດ. ສະນັ້ນ ເຂົາອາດ ຈະມີເວລາໜ້ອຍເພື່ອເຮັດວຽກບ້ານທີ່ຄູໃຫ້, ອາດຈະມາໂຮງຮຽນຊ້ຳ ແລະ ອາດສະເໜີງານອນໃນຫ້ອງ. ນີ້ບໍ່ແມ່ນບັນຫາການປະພຶດທີ່ບໍ່ເໝາະສົມ, ແຕ່ມັນແມ່ນການ ສະແດງອາການທີ່ບອກເຖິງສະຖານະພາບຂອງຄອບຄົວເຂົາ. ຍ້ອນແນວນັ້ນ, ການປະຕິບັດວິໄນ ຈຶ່ງບໍ່ແກ້ໄຂພຶດຕິກຳຂອງເດັກໄດ້. ການໃຊ້ຍຸດທະສາດອື່ນແທນແມ່ນຈຳເປັນ ເພື່ອພະຍາຍາມທົດລອງໃຫ້ການຊ່ວຍເຫຼືອການເຮັດວຽກຂອງເດັກຢູ່ເຮືອນ ກໍຄືການຮ່ຳຮຽນ ເຊັ່ນ ໃຫ້ຄວາມເອົາໃຈໃສ່ເພີ້ມໃນຊົ່ວໂມງຮຽນ, ໃຫ້ວຽກບ້ານໜ້ອຍໆ ຫຼື ບໍ່ຕ້ອງໃຫ້ ແລະ ຖ້າເປັນໄປໄດ້ໃຫ້ເວລາ ເພື່ອສຳເລັດການຮຽນຮູ້ຢູ່ໂຮງຮຽນເລີຍ, ຊຸກຍູ້ໃຫ້ເດັກຊ່ວຍກັນເພື່ອ ສຳເລັດວຽກທີ່ຄູມອບໝາຍ (ການຮຽນຮູ້ແບບເພື່ອນຊ່ວຍເພື່ອນ) ແລະ ສອນເພີ້ມອາດຈະເຮັດຢູ່ເຮືອນກໍໄດ້.

ຄວາມເຈັບປ່ວຍແລະຄວາມຫິວ. ເດັກຈະຮ່ຳຮຽນບໍ່ໄດ້ດີ ຖ້າຫາກເຂົາປ່ວຍໄຂ້, ໂຫຍຫິວ ຫຼື ເປັນໂລກຂາດສານອາຫານ. ໂດຍປົກກະຕິເດັກຈຳນວນນີ້ຈະມາຈາກຄອບຄົວທີ່ທຸກຍາກແສນເຂັນ ເປັນຄອບຄົວທີ່ຕໍ່ສູ້ກັບຊີວິດປະຈຳວັນພໍພຽງແຕ່ໃຫ້ມີຊີວິດຢູ່ລອດ. ຄວາມເຈັບປ່ວຍ ແລະ ຄວາມຫິວຈະບັ່ນທອນຄວາມຕັ້ງໃຈຂອງນັກຮຽນໃຫ້ຫຼຸດລົງ ແລະ ມີຜົນກະທົບຢ່າງແຮງຕໍ່ລະດັບຜົນສຳເລັດຂອງການຮຽນຮູ້. ຜົນສຳເລັດລະດັບຕ່ຳ ສາມາດພາໃຫ້ມີຄວາມຮູ້ສຶກມີປົມດ້ອຍ ແລະ ຄວາມຫຼົ້ມເຫຼວ ເຊິ່ງສາມາດນຳໄປສູ່ການປະພຶດທີ່ບໍ່ເໝາະສົມ. ການກະທຳທີ່ຈຳເປັນ ເພື່ອຊ່ວຍເຫຼືອເດັກນ້ອຍເຫຼົ່ານີ້ ຈະຢູ່ນອກເໜືອຂອບເຂດໂຮງຮຽນຂອງທ່ານ, ກ້າວຈາກໂຮງຮຽນຂອງທ່ານ

ໄປຫາຊຸມຊົນ. ການກະທຳອັນທຳອິດ ແມ່ນສ້າງຕັ້ງໂຄງການອາຫານຢູ່ໃນໂຮງຮຽນ ໂດຍສະໜອງເຂົ້າສວາຍ ຫຼື ອາຫານເບົາທີ່ມີຄຸນຄ່າທາງໂພຊະນາການ ໃຫ້ແກ່ນັກຮຽນເປັນປົກກະຕິ. ອັນນີ້ອາດໃຫ້ຜົນປະໂຫຍດ ໂດຍສະເພາະແກ່ນັກຮຽນຍິງ. ກຸ່ມແມ່ຍິງໃນຊຸມຊົນ ຫຼື ອົງການຈັດຕັ້ງອື່ນໆ ຂອງທ້ອງຖິ່ນສາມາດກະກຽມອາຫານສວາຍ ຫຼື ອາຫານເບົາເຫຼົ່ານີ້. ພ້ອມກັນນີ້ພວກເຮົາຈຳເປັນຕ້ອງເຮັດວຽກຮ່ວມກັບພະນັກງານສາທາລະນະສຸກປະຈຳທ້ອງຖິ່ນ ເພື່ອສ້າງແຜນງານກວດສຸຂະພາບ , ກວດແຂ້ວ ແລະ ໂພຊະນາການ ແລະ ໂຄງການປິ່ນປົວ.

ການຢ້ານກົວຄວາມຮຸນແຮງ: ການຢ້ານກົວຄວາມຮຸນແຮງໃນເວລາໄປໂຮງຮຽນ ແລະ ກັບມາບ້ານ ກໍ່ຄືຢູ່ໃນໂຮງຮຽນ ແລະ ໃນຫ້ອງຮຽນ (ໃນຮູບແບບຂອງການລົງໂທດທາງດ້ານຮ່າງກາຍ ຫຼື ການຂົ່ມເຫັງ ລັງແກ) ອາດເປັນສາເຫດໃຫ້ນັກຮຽນຈຳນວນໜຶ່ງຖອນຕົວ ແລະ ບໍ່ເຂົ້າຫ້ອງຮຽນ. ມັນຍັງພາໃຫ້ເກີດຄວາມເສຍຫາຍຢ່າງໜັກ ຕໍ່ຄວາມພາກພູມໃຈໃນຕົນເອງຂອງເຂົາ ແລະ ຍົກລະດັບຄວາມຮູ້ສຶກມີປົມດ້ອຍຂຶ້ນ. ທ່ານຈະກະທຳສິ່ງໃດແດ່ ເພື່ອໃຫ້ເຂົ້າໃຈສະພາບໂຮງຮຽນຂອງທ່ານ ໃຫ້ດີຂຶ້ນຕື່ມ? ໃຫ້ຊ່ອຍເດັກ ແລະ ສະມາຊິກຊຸມຊົນສ້າງແຜນທີ່ ເພື່ອໃຫ້ເຫັນວ່າບ່ອນໃດ ຫຼື ພື້ນທີ່ໃດໃນບໍລິເວນໂຮງຮຽນມັກເກີດຄວາມຮຸນແຮງລວມທັງການໄປມາໂຮງຮຽນ. ທ່ານຍັງສາມາດເຮັດວຽກຮ່ວມກັບຜູ້ນຳຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງພື່ອຈັດຕັ້ງກິດຈະກຳ “ການເຝົ້າລະວັງເດັກ” ເຊິ່ງເປັນບ່ອນທີ່ຄູ, ພໍ່ແມ່ຜູ້ປົກຄອງ ຫຼື ສະມາຊິກຊຸມຊົນທີ່ຮັບຜິດຊອບເຝົ້າລະວັງເບິ່ງພື້ນທີ່ ທີ່ມັກເກີດມີຄວາມຮຸນແຮງສູງທັງຢູ່ພາຍໃນ ແລະ ນອກໂຮງຮຽນ. ໃນນີ້ອາດລວມມີການຄຸ້ມກັນນັກຮຽນ ໃຫ້ໄປເຖິງເຂດປອດໄພໃນເມື່ອມີຄວາມຈຳເປັນ. ພ້ອມກັນນັ້ນໂຮງຮຽນຍັງມີຄວາມຈຳເປັນຕ້ອງມີນະໂຍບາຍທີ່ໜັ້ນຄົງ ແລະ ປະຕິບັດໄດ້ເພື່ອຕໍ່ຕ້ານຄວາມຮຸນແຮງຕໍ່ເດັກ ລວມທັງການລົງໂທດທາງດ້ານຮ່າງກາຍ ແລະ ມີຫຼັກເກນຂອງການປະຕິບັດທີ່ເໝາະສົມ ສຳລັບຄູສອນ ແລະ ພະນັກງານຂອງໂຮງຮຽນ.

ຄວາມພິການ ແລະ ຄວາມຕ້ອງການພິເສດ. ເດັກທີ່ພິການ ຫຼື ເດັກທີ່ມີຄວາມຕ້ອງການພິເສດສ່ວນຫຼາຍຈະບໍ່ໄດ້ເຂົ້າໂຮງຮຽນ, ໂດຍສະເພາະເມື່ອໂຮງຮຽນ ແລະ ລະບົບການສຶກສາຂອງພວກເຮົາບໍ່ມີນະໂຍບາຍ ຫຼື ໂຄງການເພື່ອຮັບເອົາເດັກພິການທາງດ້ານຮ່າງກາຍ, ອາລົມ ຫຼືມີບັນຫາດ້ານການຮຽນຮູ້. ເຖິງຢ່າງໃດກໍດີ, ກໍມີນັກຮຽນເຫຼົ່ານີ້ຈຳນວນໜຶ່ງຢູ່ໃນໂຮງຮຽນ ແລະ ອາດຈະຮຽນຢູ່ໃນຫ້ອງຮຽນຂອງທ່ານກໍໄດ້. ພວກເຂົາເຫຼົ່ານີ້ ອາດເປັນຜູ້ທີ່ມີຄວາມພິການ “ລີ້ຊ່ອນຢູ່” ເຊິ່ງບໍ່ສັງເກດເຫັນໄດ້ ເຊັ່ນ ພວກທີ່ມີບັນຫາທາງດ້ານການເຫັນ , ການໄດ້ຍິນ ແລະ ຜູ້ທີ່ມີຄວາມຜິດປົກກະຕິທາງສະໝອງ ເຊັ່ນ ADHD ດັ່ງທ້າວ ເອມອນ. ຖ້າຫາກຄວາມບົກຜ່ອງນີ້ບໍ່ສາມາດສັງເກດເຫັນ ຫຼື ຄົ້ນພົບພຶດຕິກຳຂອງເດັກ ເຊັ່ນ ການບໍ່ເອົາໃຈໃສ່ຮ່ຳຮຽນ, ຜົນການຮ່ຳຮຽນຕ່ຳ ຫຼື ມີການເຄື່ອນໄຫວເກີນປົກກະຕິຢູ່ໃນຫ້ອງ, ບາງທີອາດຈະກຳນົດຜິດພາດວ່າເປັນການປະພຶດທີ່ບໍ່ເໝາະສົມ. ສະນັ້ນທາງໂຮງຮຽນມີຄວາມຈຳເປັນ ຕ້ອງມີແຜນງານກວດເຊັກ

ເພື່ອບົ່ງມະຕິ/ກຳນົດສະພາວະເຫຼົ່ານີ້ແຕ່ຫົວທີ ແລະ ກ່າວເຖິງການຊ່ອຍເຫຼືອນັກຮຽນ ເພື່ອຈະ ເຮັດໃຫ້ເຂົາສາມາດຮຽນໄດ້ຢ່າງເຕັມເມັດເຕັມໜ່ວຍ ແລະ ມີສ່ວນຮ່ວມຢູ່ໃນຫ້ອງຮຽນ. ນັກຮຽນ ຂອງທ່ານ ເອງກໍສາມາດເຮັດການທົດສອບການໄດ້ເຫັນ ແລະ ໄດ້ຍິນແບບງ່າຍໆ ໂດຍເຂົາເອງ.

5.2 ຄອບຄົວ ແລະ ຊຸມຊົນ

ຄອບຄົວ ແລະ ຊຸມຊົນຄວນເປັນຜູ້ທຳອິດເພື່ອປົກປ້ອງ ແລະ ເບິ່ງແຍງດູແລເດັກ. ເພື່ອຈະ ເຂົ້າໃຈບັນຫາທີ່ເດັກອາດພວມປະເຊີນຢູ່ ແລະ ເຮັດສິ່ງໃດສິ່ງໜຶ່ງ ເພື່ອແກ້ໄຂບັນຫາເຫຼົ່ານີ້ແບບ ຍືນຍົງ. ພາຫະນະເພື່ອປ້ອງກັນການປະພຶດທີ່ບໍ່ເໝາະສົມຂອງເດັກ ທີ່ມີປະສິດທິຜົນທີ່ສຸດ ແມ່ນ ຕ້ອງຜ່ານຄອບຄົວ ແລະ ຊຸມຊົນທີ່ມີຄວາມເຂັ້ມແຂງ, ໃຫ້ການເບິ່ງແຍງລ້ຽງດູ ແລະ ຜະລິດຜົນດີ. ຢູ່ຂ້າງລຸ່ມນີ້ ມີຂໍ້ພິຈາລະນາສຳຄັນຈຳນວນໜຶ່ງ ທີ່ຕິດພັນກັບຄອບຄົວ ແລະ ຊຸມຊົນທີ່ອາດສາ ມາດກຳນົດໃຫ້ນັກຮຽນຂອງ ທ່ານ ໄປເຂົ້າໂຮງຮຽນ ຫຼື ມີວິທີປະພຶດຢູ່ພາຍໃນໂຮງຮຽນ. ***ຍັງມີປັດ ໄຈທາງດ້ານຄອບຄົວ ຫຼື ຊຸມຊົນແນວອື່ນອີກບໍ່ຢູ່ໃນຊຸມຊົນ,ສະຖາບັນ,ປະເທດຫຼືໃນວັດທະນະທຳ ຂອງທ່ານທີ່ອາດສາມາດມີອິດທິພົນກະທົບຕໍ່ການເຂົ້າຮຽນ ແລະ ຕໍ່ການປະພຶດຂອງເດັກຢູ່ໃນ ໂຮງຮຽນ.***

ຄວາມທຸກຍາກ ແລະ ຄຸນຄ່າຂອງການສຶກສາໃນພາກປະຕິບັດຕົວຈິງ. ປັດໄຈທີ່ພົວພັນ ໂດຍກົງກັບ"ຄວາມຈຳເປັນຕ້ອງເຮັດວຽກ "ດັ່ງທີ່ກ່າວມາຂ້າງເທິງນັ້ນ, ຄວາມທຸກຍາກມັກຈະມີ ອິດທິພົນກະທົບຕໍ່ການຮ່ຳຮຽນ ແລະ ການປະພຶດຂອງນັກຮຽນຢູ່ໃນໂຮງຮຽນສະເໝີ. ຍ້ອນວ່າ ພາລະແບກຫາບທາງດ້ານການເງິນຂອງເຂົາເຈົ້າ, ພໍ່ແມ່ທີ່ທຸກຍາກມັກຈະຖືກກົດດັນ ໃຫ້ສະ ໜອງຄວາມຈຳເປັນທີ່ພື້ນຖານຂອງຊີວິດ. ດັ່ງນັ້ນ, ເດັກຈຳຕ້ອງຊ່ອຍເຫຼືອພໍ່ແມ່ ເພື່ອຊອກຫາ ລາຍໄດ້ໃຫ້ແກ່ຄອບຄົວ ເພື່ອໃຊ້ຈ່າຍໃນການສຶກສາແລະຊີວິດໃນອະນາຄົດຂອງເຂົາ. ສິ່ງດັ່ງກ່າວ ຈະເກີດຂຶ້ນ, ໂດຍສະເພາະ ເມື່ອເວລາຄອບຄົວບໍ່ຮູ້ສຶກວ່າການສຶກສາມີຄວາມສຳຄັນສຳລັບຊີວິດ ປະຈຳວັນຂອງເຂົາເຈົ້າ. ດັ່ງນັ້ນ, ເຂົາຈຶ່ງບໍ່ເຂົ້າໃຈວ່າ ເປັນຫຍັງເດັກຈຶ່ງຄວນໄປໂຮງຮຽນ ແລະ ກໍ່ບໍ່ສົນໃຈວ່າລູກຫຼານຂອງຕົນຈະປະພຶດແນວໃດຢູ່ໃນໂຮງຮຽນ (ຫຼືບາງຄັ້ງກໍປະພຶດຢູ່ໃນຄອບຄົວ ເໝືອນກັນ). ພໍ່ແມ່ຜູ້ປົກຄອງອາດມີຄວາມຮູ້ສຶກວ່າໂຮງຮຽນໃນທ້ອງຖິ່ນ ບໍ່ສາມາດສະໜອງ ການສຶກສາທີ່ມີຄຸນນະພາບດີ ແລະ ທັກສະທີ່ລູກຫຼານຂອງເຂົາຈະຮຽນ ເພື່ອໃຫ້ເປັນອາຊີບທີ່ແນ່ ນອນໃດໜຶ່ງ ແມ່ນມີຄຸນຄ່າກວ່າທັກສະທີ່ເຂົາຈະຮຽນຢູ່ໃນຫ້ອງຮຽນ.

ເມື່ອຕົ້ນກຳເນີດຂອງຄວາມທຸກຍາກແມ່ນເລື່ອງເສດຖະກິດ, ຍຸດທະສາດທີ່ມີປະສິດທິຜົນ ເພື່ອເຂົ້າເຖິງເດັກຜູ້ທຸກຍາກ, ນຳເອົາເຂົາເຈົ້າມາເຂົ້າໂຮງຮຽນແລ້ວ ຊ່ອຍເຂົາເຈົ້າໃຫ້ໄດ້ຮຽນ ຢ່າງຫ້າວຫັນ ນັ້ນສ່ວນໃຫຍ່ຈະຕ້ອງອີງໃສ່ສິ່ງກະຕຸ້ນທາງດ້ານເສດຖະກິດໃນໄລຍະສັ້ນ ແລະ ໄລ ຍະຍາວສຳລັບເດັກ ແລະ ຄອບຄົວຂອງເຂົາ.

ການເບິ່ງແຍງດູແລບໍ່ພຽງພໍ. ຍ້ອນວ່າຄວາມຕ້ອງການຊອກຫາເງິນ, ພໍ່ແມ່ຈຳນວນໜຶ່ງ ອາດມີເວລາໜ້ອຍເພື່ອດູແລລູກຫຼານຂອງຕົນ. ບາງຄັ້ງເຂົາເຈົ້າອາດຈຳເປັນປະເຮືອນຊານໄປຊົ່ວ ຄາວ ຫຼື ໃນໄລຍະຍາວ. ຜົນສຸດທ້າຍ ເຂົາເຈົ້າອາດເອົາເດັກຝາກໄວ້ຢູ່ໃນຄວາມດູແລຂອງພໍ່ເຖົ້າ ແມ່ເຖົ້າ ຫຼື ຜູ້ອື່ນໆ. ບັນດາພໍ່ແມ່ ຫຼື ຜູ້ເບິ່ງແຍງເຫຼົ່ານີ້ ອາດບໍ່ມີຄວາມຮູ້ປະສົບການ ຫຼື ຊັບພະຍາ ກອນທີ່ພຽງພໍ ເພື່ອສະໜອງແກ່ການລ້ຽງດູເດັກຢ່າງເໝາະສົມ ເຊິ່ງອາດພາໃຫ້ເຂົາເຈັບໄຂ້ໄດ້ ປ່ວຍ ແລະ ອຶດຫິວ. ພວກເພິ່ນອາດບໍ່ເຫັນຄຸນຄ່າຂອງການສຶກສາ ເມື່ອຂາດເຂີນເງິນຄ່າຢ່າງ ໜັກໜ່ວງ ແລະ ພວກເພິ່ນອາດບໍ່ສົນວ່າເດັກຈະປະພຶດແນວໃດ ຢູ່ໃນຫ້ອງຮຽນອີກດ້ວຍ. ມີວິທີການອັນໃດແດ່ທີ່ສາມາດນຳມາປະຕິບັດ ເພື່ອຊ່ວຍເຫຼືອເດັກເຫຼົ່ານີ້ໄດ້?.

- ❖ ໃນໂອກາດອັນສຳຄັນ ໃຫ້ເຊີນເອົາພໍ່ແມ່ເດັກ ແລະ ຜູ້ດູແລເດັກຄົນອື່ນໆ ມາຢ້ຽມຢາມ ໂຮງຮຽນ. ສະແດງຜົນງານຂອງນັກຮຽນໃຫ້ເຂົາເຈົ້າໄດ້ເຫັນ, ໃຫ້ການໂອ້ລົມແບບເປັນ ກັນເອງບໍ່ເປັນທາງການ ຫຼື ນຳສະເໜີການຮຽນຮູ້ແບບມີສ່ວນຮ່ວມກ່ຽວກັບການປັບປຸງສຸ ຂະພາບ ແລະ ການປະ ພຶດ ໂດຍຜ່ານການລ້ຽງດູທີ່ດີ.
- ❖ ໃຫ້ເຊີນເອົາພໍ່ແມ່ເດັກ ແລະ ຜູ້ດູແລເດັກທີ່ມີຄວາມຮູ້ພິເສດມາ ເວົ້າກ່ຽວກັບທັກສະຂອງ ເຂົາ ກັບນັກຮຽນຢູ່ໃນຫ້ອງຂອງທ່ານ ເພື່ອໃຫ້ເຂົາເຈົ້າສາມາດຮຽນຮູ້ໄດ້ວ່າ ຄວາມຮູ້ຂອງ ເຂົາເຈົ້າມີຄຸນຄ່າສຳລັບເດັກເຊັ່ນດຽວກັນ.
- ❖ ຊຸກຍູ້ໃຫ້ມີກອງປະຊຸມ “ຄູສອນ-ພໍ່ແມ່ເດັກ/ຜູ້ດູແລເດັກ” ເປັນປະຈຳ ເພື່ອສົນທະນາເລື່ອງ ຄວາມກ້າວໜ້າໃນການຮຽນຂອງນັກຮຽນ ແລະ ການເບິ່ງແຍງດູແລເດັກທີ່ດີນັ້ນ ສາມາດ ປັບປຸງການຮຽນຮູ້, ຄວາມພາກພູມໃຈໃນຕົນເອງ ແລະ ພຶດຕິກຳຂອງເດັກ.
- ❖ ຊອກຫາອຸປະກອນລ້ຽງເດັກຈາກອົງການຈັດຕັ້ງລັດຖະບານ ແລະ ຈາກອົງການທີ່ບໍ່ສັງ ກັດລັດ, ພິເສດແມ່ນຈາກອົງການທີ່ເຮັດວຽກໃນເລື່ອງສຸຂະພາບ ແລະ ໂພຊະນາການ. ນຳໃຊ້ອຸປະກອນ ເຫຼົ່ານັ້ນ ຢູ່ໃນໂຄງການສຸຂະພາບໃນໂຮງຮຽນ ຫຼື ໂຄງການສຶກສາ ຊີວິດໃນຄອບຄົວຮ່ວມກັບເດັກ. ໃຫ້ເດັກເອົາອຸປະກອນເຫຼົ່ານັ້ນເມືອເຮືອນ ເພື່ອອ່ານໃຫ້ ສະມາຊິກໃນຄອບຄົວຂອງເຂົາຟັງ.
- ❖ ສ້າງແຜນງານການເຝິກອົບຮົມທັກສະການລ້ຽງດູເດັກ ເຊິ່ງ ໂຮງຮຽນ ແລະ ອົງກອນໃນ ທ້ອງຖິ່ນສາມາດຊ່ວຍເຫຼືອພໍ່ແມ່ ແລະ ຜູ້ດູແລເດັກຄົນອື່ນໆ ເພື່ອປັບປຸງພາກປະຕິບັດ ການລ້ຽງດູ ແລະ ການດູແລເດັກ.
- ❖ ສ້າງສາຍພົວພັນຮ່ວມມືກັບອົງການສະຫວັດດີການສັງຄົມໃນທ້ອງຖິ່ນ ແລະ ເດັກຜູ້ທີ່ຢູ່ໃນ ຄອບຄົວທີ່ມີຄວາມຫຍຸ້ງຍາກພິເສດ.

ຄອບຄົວ ແລະ ຊຸມຊົນ: ຍຸດທະສາດຈາກປະເທດໄທ.

ຢູ່ໃນປະເທດໄທ, ໂຮງຮຽນເພື່ອນເດັກກຳລັງນຳໃຊ້ຂໍ້ມູນຂ່າວສານກ່ຽວກັບຜົນສຳເລັດທາງດ້ານ ການຮຽນຮູ້ຂອງນັກຮຽນ ແລະ ຄວາມເປັນມາຂອງຄອບຄົວນັກຮຽນ ເພື່ອກຳນົດເດັກຜູ້ທີ່ຮຽນ

ບໍ່ໄດ້ດີ, ຂາດຮຽນເລື້ອຍໆ, ບໍ່ມີຄວາມສົນໃຈໃນການຮຽນ, ແລະ ມີແນວໂນ້ມທີ່ຈະປະລະການຮຽນ. ສ່ວນຫຼາຍ ແມ່ນຍ້ອນຄອບຄົວມີເງິນໜ້ອຍ ແລະ ເຫັນການໃຊ້ແຮງງານລູກຫລານມີຄຸນຄ່າຫລາຍກວ່າຄຸນຄ່າຂອງການສຶກສາ. ເດັກນັກຮຽນເຫຼົ່ານີ້ໄດ້ຮັບບູລິມະສິດ ໃນການເຝິກອົບຮົມທັກສະເພື່ອການດຳລົງຊີວິດ ເຊັ່ນ ຕຳຜ້າໄໝ ແລະ ຜ້າຝ້າຍ, ຖັກແສ່ວ, ຊ່າງໄມ້, ເຮັດການຜະລິດດ້ານກະສິກຳ, ພິມດີດ, ເຝິກອົບຮົມຄອມພິວເຕີ. ການເຝິກອົບຮົມນີ້ ໄດ້ເພີ່ມລາຍໄດ້ຂອງຄອບຄົວ ໃນເວລາທີ່ນັກຮຽນຮຽນຢູ່ໃນໂຮງຮຽນ ແລະ ໄດ້ໃຫ້ທັດສະນະແກ່ນັກຮຽນ ເຊິ່ງເຂົາເຈົ້າສາມາດນຳໃຊ້ ຈົນຕະຫລອດຊີວິດຂອງເຂົາເຈົ້າ. ມັນຍັງໄດ້ຍົກລະດັບຄວາມພາກພູມໃຈໃນຕົນເອງ, ຄວາມເຊື່ອໝັ້ນ ແລະ ຄວາມສຳນຶກຂອງຄວາມສຳເລັດຜົນ. ມີນັກຮຽນເຫຼົ່ານີ້ຈຳນວນໜຶ່ງ ໄດ້ຮັບລາງວັນລະດັບຊາດ ແລະ ລະດັບພາກພື້ນ ສຳລັບຜົນງານຂອງເຂົາເຈົ້າ. ຢູ່ໃນໂຮງຮຽນຈຳນວນໜຶ່ງ, ສະມາຊິກຄອບຄົວຂອງນັກຮຽນເຫຼົ່ານີ້ ໄດ້ຮັບໃຊ້ເປັນ “ຄູ” ເພື່ອສິດສອນທັກສະທີ່ມີມາແຕ່ດັ້ງເດີມໃຫ້ແກ່ເດັກ ເຊັ່ນ ການຍ້ອມໄໝ ແລະ ຕຳແບບລາຍພື້ນເມືອງ. ການມີສ່ວນຮ່ວມຄືແນວນີ້ ມັນໄດ້ເພີ່ມຄຸນຄ່າຂອງໂຮງຮຽນຢູ່ໃນສາຍຕາຂອງຜູ້ປົກຄອງນັກຮຽນ ແລະ ສະມາຊິກຊຸມຊົນ ໂດຍຜ່ານການປັບປຸງວິຊາຊີບ ແລະ ເນັ້ນໜັກຄຸນຄ່າຂອງການຮັກສາຮີດຄອງວັດທະນະທຳທີ່ສຳຄັນ. ນອກນີ້ມັນຍັງເພີ່ມທະວີການຕິດຕໍ່ສື່ສານ ລະຫວ່າງ ຜູ້ປົກຄອງ ແລະ ເດັກນັກຮຽນ ກ່ຽວກັບວຽກງານ/ການຮຽນ ແລະ ການປະພຶດຂອງນັກຮຽນຢູ່ໃນໂຮງຮຽນ ລວມທັງການສຶກສາຂອງນັກຮຽນຈະນຳມາໃຫ້ຄອບຄົວໃນອະນາຄົດ. ***ຍຸດທະສາດທີ່ຄ້າຍຄືກັນນີ້ຈະກາຍມາເປັນ ພາກສ່ວນໜຶ່ງ ຂອງຫລັກສູດການຮຽນໃນໂຮງຮຽນຂອງທ່ານ ບໍ?***

ຂໍ້ຂັດແຍ່ງ: ພໍ່ແມ່ເດັກຈຳນວນໜຶ່ງໄດ້ມີການຜິດຖຽງກັນໃນດ້ານເງິນຄຳ ຫຼື ບັນຫາອື່ນໆ (ເຊັ່ນ ເປັນຄົນຂີ້ເມົາ ຫຼື ເສບຢາເສບຕິດ) ອາດຮ້າຍດ່າລູກ ເຊິ່ງພາໃຫ້ເກີດມີການກະທຳທີ່ຮຸນແຮງ ແລະ ທາລຸນເດັກ ກໍຄືເຮັດໃຫ້ມີຄວາມຮູ້ສຶກມີປົມດ້ອຍຢູ່ໃນຕົວເດັກ. ອັນນີ້ ອາດເຮັດໃຫ້ເດັກບໍ່ໄປໂຮງຮຽນປົກກະຕິ ແລະ ປະພຶດບໍ່ເໝາະສົມ ຫຼື ອາດຊຸກຍູ້ໃຫ້ເດັກໜີອອກຈາກເຮືອນ ແລະ ໂຮງຮຽນໄປ. ໃນໄລຍະທີ່ປະເທດອາຊີ ມີວິກິດການທາງດ້ານເສດຖະກິດ ໃນປີ 1997 ມີເດັກຊາຍຄົນໄທ ຜູ້ໜຶ່ງທີ່ຕົກຢູ່ໃນສະພາບການຜິດຖຽງກັນ ຂອງພໍ່ແມ່ ໃນເລື່ອງຂອງເງິນຄຳ ແລະຖືກພໍ່ແມ່ຕີ. ການດຳລົງຊີວິດຢູ່ໃນຄອບຄົວແມ່ນທຸກຍາກຂາດເຂີນ. ອີກບໍ່ດົນລາວກໍເລີ່ມຖອນຕົວອອກຈາກຫ້ອງຮຽນ ແລະ ບໍ່ເຂົ້າມີສ່ວນຮ່ວມໃນຫ້ອງຮຽນອີກ. ລາວບໍ່ຄ່ອຍເຮັດວຽກບ້ານໃຫ້ສຳເລັດຕາມກຳນົດເວລາ ຫຼື ບໍ່ໄດ້ເຮັດເລີຍ. ແທນທີ່ຈະລົງໂທດເດັກຊາຍຄົນນັ້ນ, ຄູສອນໄດ້ບອກໃຫ້ລາວເລົ່າເຖິງບັນຫາຊີວິດໃນຄອບຄົວ ແລະ ຄວາມຈິງກ່ຽວກັບສະພາບຂອງລາວກໍໄດ້ເຜີຍອອກມາ. ລາວເປີດເຜີຍອອກມາວ່າລາວບໍ່ເຂົ້າໃຈວ່າ ເປັນຫຍັງລາວຈຶ່ງຖືກຕີ, ລາວບໍ່ໄດ້ກ່ຽວຂ້ອງຫຍັງທັງໝົດກັບບັນຫາເງິນຄຳຂອງຄອບຄົວ. ຫຼັງຈາກນັ້ນ ຄູສອນກໍໄດ້ຍ່າງອອກໄປສົນລະເສີນເດັກຜູ້ນັ້ນ ພ້ອມທັງໃຫ້ໂອກາດແກ່ລາວໄດ້ທຳຄວາມດີຫລາຍຂຶ້ນ ແລະ ໃຫ້ຄວາມເອົາໃຈໃສ່ລາວ. ບໍ່ວ່າເວລາໃດກໍຕາມ ຖ້າເປັນໄປໄດ້ ຄູສອນໄດ້ຂໍໃຫ້ລາວຊ່ອຍເຫຼືອວຽກໃດໜຶ່ງ ໃນ

ເວລາກ່ອນ ຫຼື ຫຼັງເລີກຮຽນ ເພື່ອຫາວິທີເຮັດໃຫ້ລາວໄດ້ຢູ່ໃນຫ້ອງຮຽນຫຼາຍກວ່າຈະຢູ່ໃນສະພາບແວດລ້ອມຂອງເຮືອນທີ່ວຸ້ນວາຍ. ການປ່ຽນແປງຂອງເດັກໄດ້ເລີ່ມຕົ້ນຂຶ້ນຂ້ອນຂ້າງໄວ ແລະ ເລີ່ມຕົ້ນຮຽນໄດ້ດີຂຶ້ນພາຍຫຼັງທີ່ພໍ່ແມ່ຂອງລາວ ໄດ້ແກ້ໄຂຄວາມແຕກຕ່າງທາງດ້ານແນວຄິດ ແລະ ເຂົາເຈົ້າກໍໄດ້ເຫັນວ່າ ເດັກນັ້ນຮຽນໄດ້ດີໃນໂຮງຮຽນ ແລະ ໃນເວລາຈັດຕັ້ງກອງປະຊຸມລະຫວ່າງ ພໍ່ແມ່-ຄູ ເຂົາເຈົ້າກໍໄດ້ຍ້ອງຍໍເດັກດັ່ງກ່າວ.

ການຈຳແນກ: ເດັກຜູ້ທີ່ມາຈາກຄອບຄົວທີ່ມີຄວາມແຕກຕ່າງຈາກຊຸມຊົນທາງດ້ານພາສາ, ສາສະໜາ, ຊົນຊັ້ນວັນນະ ແລະ ວັດທະນະທຳ ແລະ ອື່ນໆ ຈະມີຄວາມສ່ຽງໃນການເປັນເປົ້າໝາຍຂອງການຖືກຂົ່ມເຫັງ, ຫົວເລາະເຍາະເຍີ້ຍ, ຫລອກລໍ້ ແລະ ອື່ນໆ. ຄວາມສ່ຽງດັ່ງກ່າວຍັງເກີດຂຶ້ນກັບເດັກທີ່ໄດ້ຮັບຜົນກະທົບຈາກ HIV/AIDS. ທັດສະນະຄະຕິທີ່ເປັນແງ່ລົບ, ມີການຈຳແນກຕໍ່ເດັກເຫຼົ່ານີ້ ອາດຈະເປັນອຸປະສັກທີ່ໃຫຍ່ຫຼວງອັນໜຶ່ງ ໃນການບັນຈຸເດັກກຸ່ມນີ້ ເຂົ້າຮຽນຢູ່ໃນໂຮງຮຽນລວມທັງການທີ່ຈະໃຫ້ໂອກາດເຂົາເຈົ້າໄດ້ມີສ່ວນຮ່ວມຢ່າງສະເໝີພາບ, ຫ້າວຫັນ ແລະ ມ່ວນຊື່ນຢູ່ໃນຂະບວນການຮ່ຳຮຽນ. ທັດສະນະຄະຕິອັນຫຍໍ້ທໍ້ ສາມາດພົບເຫັນໄດ້ໃນທຸກລະດັບ: ພໍ່ແມ່, ສະມາຊິກຊຸມຊົນ, ໂຮງຮຽນ ແລະ ຄູສອນ, ພະນັກງານລັດ ແລະ ແມ້ແຕ່ຢູ່ໃນໝູ່ນັກຮຽນດ້ວຍໂອກາດດ້ວຍກັນ. ຄວາມຢ້ານກົວ, ຂໍ້ຫ້າມຕ່າງໆ, ຄວາມອາຍ, ການປ່ອຍປະລະເລີຍ ແລະ ຂໍ້ມູນຂ່າວສານທີ່ຜິດພ້ຽນ ແລະ ອື່ນໆ ຈະຊຸກຍູ້ໃຫ້ມີທັດສະນະຄະຕິດ້ານລົບຕໍ່ເດັກກຸ່ມດັ່ງກ່າວ ແລະ ສະພາບຂອງເຂົາ. ເດັກເຫຼົ່ານີ້ອາດຈະພັດທະນາຄວາມພາກພູມໃຈ ໃນຕົນເອງຕ່ຳ, ລີ້ຊ່ອນ ແລະ ຫຼົບຫຼີກສັງຄົມ, ປະພຶດແນວບໍ່ດີຢູ່ໃນຫ້ອງຮຽນ ແລະ ກາຍເປັນສະມາຊິກທີ່ຖືກມອງຂ້າມຈາກຊຸມຊົນ. ສຳລັບເດັກດັ່ງກ່າວ ພວກເຮົາຈຳເປັນຕ້ອງເນັ້ນໜັກພິເສດໃນເລື່ອງຫລຸດຜ່ອນການຈຳແນກ ແລະ ຍອມຮັບເອົາຄຸນຄ່າຂອງຄວາມຫຼາກຫຼາຍ.

- ❖ ໃຫ້ເຮັດວຽກຮ່ວມກັບພໍ່ແມ່ຂອງເດັກ ແລະ ສະມາຊິກຊຸມຊົນ ເພື່ອດັດແກ້ບົດຮຽນ ແລະ ອຸປະກອນການສິດສອນຢູ່ໃນຫ້ອງ ເພື່ອເປັນຕົວແທນໃຫ້ແກ່ວັດທະນະທຳ ແລະ ພາສາຂອງຊຸມຊົນ. ເຮັດຄືແນວນີ້ຈະຊ່ວຍໃຫ້ຮັບປະກັນໄດ້ວ່າຊຸມຊົນຈະຊອກຫາສື່-ອຸປະກອນອັນແທ້ຈິງ ແລະ ເປັນປະໂຫຍດ ແລະ ຈະຊຸກຍູ້ໃຫ້ເດັກທຸກຄົນມາໂຮງຮຽນ ແລະ ຮຽນຮ່ວມແບບຊ່ວຍເຫຼືອກັນ.
- ❖ ໃຫ້ນຳໃຊ້ນິທານທ້ອງຖິ່ນ, ນິທານພື້ນເມືອງ,ເພງແລະ ກາບກອນທີ່ຂຽນຂຶ້ນຢູ່ໃນຫ້ອງຮຽນ
- ❖ ສຳລັບເດັກຊົນເຜົ່າທີ່ທ່ານສອນຢູ່ໃນຫ້ອງຮຽນ, ໃຫ້ເຮັດວຽກຮ່ວມກັບຄູສອນທີ່ຮູ້ພາສາເຜົ່າ ຫຼື ຄູຜູ້ອື່ນທີ່ເວົ້າພາສາເຜົ່າຂອງເດັກໄດ້ (ພາສາຂອງຄອບຄົວເດັກ ຫຼື ພາສາຂອງຊຸມຊົນ) ເພື່ອສ້າງຫຼັກສູດການເຝິກອົບຮົມພາສາລາວເພີ້ມຢ່າງເໝາະສົມ ສຳລັບຫ້ອງຮຽນຂອງທ່ານ.

ເພື່ອຫລຸດຜ່ອນການຂົ່ມເຫັງກັນພວກທ່ານຈຳເປັນຈະຕ້ອງປະຕິບັດດັ່ງນີ້ ເຊັ່ນ:

- ❖ ດຳເນີນກິດຈະກຳຕ່າງໆເພື່ອຊ່ອຍນັກຮຽນໃຫ້ມີຄວາມຜ່ອນຄາຍ ແລະ ຫຼຸດຜ່ອນຄວາມຕຶງຄຽດ .
- ❖ ເພີ່ມທະວີການຮ່ຳຮຽນແບບຊ່ອຍເຫຼືອກັນຢູ່ພາຍໃນຫ້ອງຮຽນ(ເດັກນັກຮຽນຊ່ອຍເຫຼືອເຊິ່ງກັນ ແລະ ກັນໃນການຮຽນ).
- ❖ ປັບປຸງວິທີການສື່ສານທີ່ດີໃຫ້ແກ່ເດັກ ໂດຍໃຫ້ນັກຮຽນທຸກຄົນມີອຳນາດຫຼາຍຂຶ້ນເຊັ່ນ ໃຫ້ເຂົາເຈົ້າສ້າງກົດລະບຽບຂອງຫ້ອງຮຽນ ແລະມີຄວາມຮັບຜິດຊອບຢູ່ໃນຄະນະກຳມະການນັກຮຽນ.
- ❖ ເພີ່ມຄວາມຮັບຜິດຊອບຢູ່ພາຍໃນຫ້ອງຮຽນ ໂດຍສ້າງຕັ້ງຄະນະກຳມະການ ແລະ ເຮັດວຽກຢ່າງໃກ້ຊິດກັບພໍ່ແມ່ນັກຮຽນ ແລະ ຊຸມຊົນໃນທ້ອງຖິ່ນ.
- ❖ ສ້າງຍຸດທະສາດເດັກ ເພື່ອເດັກເພື່ອແກ້ໄຂຄວາມຂັດແຍ່ງ ເຊັ່ນ ການສອນທັກສະການແກ້ໄຂຄວາມຂັດແຍ່ງ ກໍຄື ເລື່ອງການເຈລະຈາ ແລະ ການນັ່ງສະມາທິ .
- ❖ ໃຫ້ນັກຮຽນຂອງທ່ານເປັນຜູ້ກຳນົດວ່າ ຈະໃຊ້ມາດຕະການດ້ານວິໄນອັນໃດ ເພື່ອປະຕິບັດຕໍ່ຜູ້ທີ່ຂົ່ມເຫັງຜູ້ອື່ນ.

ຢູ່ພາຍໃນຫ້ອງສູດ, ຄູສາມາດນຳໃຊ້ລະຄອນ ຫຼື ລະຄອນຫຸ່ນ ເພື່ອສະແດງໃຫ້ເຫັນການຂົ່ມເຫັງ ແລະ ສາເຫດຂອງມັນ, ລວມທັງການຊອກຫາວິທີການແກ້ໄຂ ເມື່ອມັນເກີດຂຶ້ນຢູ່ພາຍໃນ ແລະ ນອກໂຮງຮຽນ.ຕົວຢ່າງຄູສອນຢູ່ບ້ານແຫ່ງໜຶ່ງໄດ້ຜະລິດຫຸ່ນ ແລະ ສ້າງເປັນລະຄອນກ້ອມ ເພື່ອສະແດງໃຫ້ເຫັນຮູບການຕ່າງໆຂອງການຂົ່ມເຫັງດ້ານຜິວພັນ. ຈາກນັ້ນເຂົາເຈົ້າກໍໄດ້ພັດທະນາບາດກ້າຂອງການສະແດງ ເພື່ອຊ່ອຍໃຫ້ເດັກກຳໄດ້ສະຖານະການເຫຼົ່ານີ້.

ການສົນທະນາກ່ຽວກັບປະເດັນບັນຫາທີ່ລະອຽດອ່ອນ ສາມາດນຳໃຊ້ຄຽງຄູ່ກັນໄປກັບນິທານ ຫຼື ສະແດງບົດບາດສົມມຸດ ເພື່ອໃຫ້ເດັກໄດ້ທົດລອງວິທີທີ່ຈະບອກວ່າ “ບໍ່/ຢ່າ” ດ້ວຍຄວາມໝັ້ນໃຈ ກໍ່ຄືຊອກຫາຄຳສັບ/ພາສາທີ່ຖືກຕ້ອງ ເພື່ອໃຊ້ກັບພວກມັກຂົ່ມເຫັງ ແລະ ທາລຸນຜູ້ອື່ນ.

6. ການຮຽນຮູ້ກ່ຽວກັບຄອບຄົວຂອງນັກຮຽນ

ຢູ່ໃນຫຼາຍໂຮງຮຽນ ໃນຂົງເຂດອາຊີ ແລະ ປາຊີຟິກ, ຄູສອນໄດ້ສ້າງ**ແຟ້ມຂໍ້ມູນນັກຮຽນ**ໄວ້ ເພື່ອເປັນເຄື່ອງມືສຳລັບຮຽນຮູ້ກ່ຽວກັບຄອບຄົວ ຫຼື ທີ່ມາຂອງນັກຮຽນ. ຄຸນປະໂຫຍດຂອງແຟ້ມຂໍ້ມູນນັກຮຽນແມ່ນ:

- ❖ ຊ່ອຍໃຫ້ຄູສອນຮູ້ຈັກເຫດຜົນວ່າເປັນຫຍັງ ນັກຮຽນຈຶ່ງບໍ່ມາໂຮງຮຽນ, ປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນ ຫຼື ມີຄວາມສ່ຽງຕໍ່ການປະລະການຮຽນ.
- ❖ ສະແດງໃຫ້ເຫັນຄວາມແຕກຕ່າງຫຼາກຫຼາຍຂອງນັກຮຽນຢູ່ໃນຊຸມຊົນ ໃນດ້ານບຸກຄະລິກລັກສະນະສ່ວນບຸກຄົນ ແລະ ບຸກຄະລິກລັກສະນະຂອງຄອບຄົວຂອງເດັກ.
- ❖ ຊ່ອຍໃນການວາງແຜນ ເພື່ອແກ້ໄຂ ຫຼື ເອົາຊະນະປັດໄຈຕ່າງໆທີ່ເຮັດໃຫ້ເດັກບໍ່ໄດ້ເຂົ້າໂຮງຮຽນ ແລະ ຊຸກຍູ້ໃຫ້ເດັກປະພຶດບໍ່ເໝາະສົມ.

ແຟ້ມຂໍ້ມູນ/ປະຫວັດຫຍໍ້ຂອງນັກຮຽນສາມາດປະດິດສ້າງຂຶ້ນໄດ້ໂດຍນຳໃຊ້ບາດກ້າວຂ້າງລຸ່ມນີ້:

ບາດກ້າວ1: ໃຫ້ລະດົມຄວາມຄິດກັບເພື່ອນຮ່ວມງານຂອງ ທ່ານ ກ່ຽວກັບພຶດຕິກຳຜິດໆທີ່ສຳຄັນ ຕົ້ນຕໍ ທີ່ເຫັນຢູ່ໃນນັກຮຽນ ຂອງທ່ານ ແລະ ບັນດາປັດໄຈທີ່ມີຢູ່ພາຍໃນຄອບຄົວ ຫຼື ຊຸມຊົນ ທີ່ອາດ ເປັນສາເຫດແກ່ນັກຮຽນ (ດັ່ງໄດ້ສົນທະນາມາຂ້າງເທິງ). ໃຫ້ແນ່ໃຈວ່າໄດ້ກວມລວມເອົາປັດໄຈ ໃດໜຶ່ງ ທີ່ທ່ານຄິດວ່າ ມັນອາດເປັນສາເຫດເຮັດໃຫ້ນັກຮຽນຂາດໂຮງຮຽນ ຫຼືມາຮອດໂຮງຮຽນຊ້າ.

ບາດກ້າວ 2 : ນຳໃຊ້ປັດໄຈເຫຼົ່ານີ້, ສ້າງຄຳຖາມຕ່າງໆ ເຊິ່ງເມື່ອໄດ້ຄຳຕອບແລ້ວ ອາດໃຫ້ຄວາມ ເຂົ້າໃຈກະຈ່າງແຈ້ງແກ່ທ່ານວ່າ ເປັນຫຍັງເດັກຈຶ່ງປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນ. ຢູ່ໃນຂ້າງ ລຸ່ມນີ້ ແມ່ນຕົວຢ່າງຂອງບັນຊີຄຳຖາມ ທີ່ໄດ້ນຳໃຊ້ຢູ່ໃນໂຮງຮຽນເພື່ອນເດັກຢູ່ໃນປະເທດຟິລິປິນ ແລະ ປະເທດ ໄທ ເພື່ອເຂົ້າໃຈສະພາບຂອງນັກຮຽນ ທີ່ມີປະຫວັດຄວາມເປັນມາ ແລະ ຄວາມ ອາດສາມາດແຕກຕ່າງກັນ ເຊິ່ງເປັນຜູ້ທີ່ຮຽນບໍ່ໄດ້ດີ ແລະ ອາດມີຄວາມຮູ້ສຶກວ່າ ຕົນເອງມີປົມ ດ້ອຍ. ***ທ່ານສາມາດສ້າງບັນຊີຄຳຖາມຂອງທ່ານເອງໄດ້ ໂດຍອີງຕາມອຸປະສັກທີ່ທ່ານຮູ້ສຶກວ່າ ມັນມີທີ່ວ່າໄປຢູ່ໃນຊຸມຊົນຂອງທ່ານ.***

ການຈຳແນກ.

- ເດັກເປັນເພດໃດ ?
- ອາຍຸຂອງເດັກເທົ່າໃດ ?
- ສັນຊາດຂອງເດັກແມ່ນສັນຊາດໃດ ຫຼືຢູ່ໃນກຸ່ມຊົນເຜົ່າໃດ ?
- ເດັກນັບຖືສາສະໜາໃດ ?
- ພາສາແມ່ຂອງເດັກແມ່ນພາສາຫຍັງ ?
- ບ້ານເຮືອນຂອງນັກຮຽນຕັ້ງຢູ່ຫ່າງຈາກໂຮງຮຽນຫຼາຍປານໃດ (ໄລຍະທາງ, ໄລຍະເວລາ ເດີນທາງ) ?
- ພາຫະນະທີ່ເດັກໃຊ້ໃນການເດີນທາງແມ່ນຫຍັງ ແລະມີຄວາມປອດໄພບໍ່ ?

ປັດໄຈລະດັບນັກຮຽນ

- ນັກຮຽນໄດ້ເຮັດວຽກຢູ່ໃນ ຫຼື ນອກບ້ານເພື່ອຊອກຫາລາຍໄດ້ ຫຼື ຊ່ວຍເຫຼືອວຽກງານຄອບ ຄົວບໍ່ ?
- ສະຖານະພາບທາງດ້ານສຸຂະພາບ ແລະໂພຊະນາການຂອງເດັກ ເປັນແນວໃດ ?
- ເດັກມີຄວາມພິການອັນໃດອັນໜຶ່ງບໍ່ທີ່ມີຜົນກະທົບຕໍ່ການເຂົ້າເຖິງອາຄານສະຖານທີ່ຂອງ ໂຮງຮຽນ ຫຼື ມີຜົນກະທົບຕໍ່ການຮ່ຳຮຽນຢູ່ໃນຫ້ອງຮຽນ .

ການເບິ່ງແຍງດູແລ; ຂໍ້ຂັດແຍ່ງ

- ຜູ້ປົກຄອງຂອງເດັກມີອາຍຸເທົ່າໃດ ?

- ❖ ຜູ້ປົກຄອງຍັງມີຊີວິດຢູ່ທັງສອງຄົນບໍ່, ຖ້າບໍ່, ຜູ້ໃດເສຍຊີວິດແລ້ວ ?
- ❖ ຜູ້ປົກຄອງແຕ່ລະຄົນມີການສຶກສາໃນລະດັບໃດ ?
- ❖ ມີສະມາຊິກຄອບຄົວຜູ້ໃດຜູ້ໜຶ່ງປະລະການຮຽນບໍ່ ? ຍ້ອນຫຍັງ ?
- ❖ ຜູ້ປົກຄອງເດັກຍັງຢູ່ດ້ວຍກັນບໍ່?
- ❖ ເດັກຢູ່ນຳຜູ້ໃດ ?
- ❖ ມີຈັກຄົນທີ່ອາໄສຢູ່ໃນເຮືອນ ?
- ❖ ມີເດັກອີກຈັກຄົນທີ່ອາໄສຢູ່ເຮືອນດຽວກັບເດັກ (ໂດຍສະເພາະ ເດັກອ່ອນ)
- ❖ ຜູ້ໃດເປັນຜູ້ດູແລເດັກອ່ອນເຫຼົ່ານີ້ເປັນຕົ້ນຕໍຕົ້ນຕໍ ?
- ❖ ຜູ້ປົກຄອງເຄີຍໄປເຮັດວຽກເຂດອື່ນບໍ່ ?

ຄວາມທຸກຍາກ ແລະ ຄຸນຄ່າໃນພາກປະຕິບັດຕົວຈິງຂອງການສຶກສາ.

- ❖ ຜູ້ປົກຄອງເດັກແຕ່ລະຄົນມີອາຊີບຕົ້ນຕໍຫຍັງ ?
- ❖ ຄອບຄົວມີດິນສ່ວນຕົວເພື່ອສ້າງລາຍໄດ້ບໍ່? ຖ້າມີ, ດິນກວ້າງເທົ່າໃດ ?
- ❖ ຄອບຄົວໄດ້ເຊົ່າດິນເພື່ອສ້າງລາຍໄດ້ບໍ່? ຖ້າໄດ້ເຊົ່າ, ດິນກວ້າງເທົ່າໃດ ?
- ❖ ລາຍໄດ້ສະເລ່ຍຂອງຄອບຄົວໃນເດືອນໜຶ່ງມີຫຼາຍປານໃດ ?
- ❖ ຄອບຄົວໄດ້ກູ້ຢືມເງິນເພື່ອສ້າງລາຍໄດ້ບໍ່? ຖ້າໄດ້ຢືມ, ຢືມເທົ່າໃດ?ໄດ້ຢືມເລື້ອຍປານໃດ ແລະ ໄດ້ຢືມຢູ່ໃນໄລຍະເວລາໃດຂອງປີໜຶ່ງໆ?
- ❖ ຄອບຄົວຂອງເດັກນັກຮຽນໄດ້ເປັນສະມາຊິກຂອງກຸ່ມພັດທະນາຊຸມຊົນໃດໜຶ່ງບໍ່?

ບາດກ້າວທີ 3. ສ້າງແບບສອບຖາມເພື່ອເກັບກຳຄຳຕອບຕໍ່ຄຳຖາມເຫຼົ່ານີ້. ແບບສອບຖາມນີ້ສາມາດເປັນບັນຊີຄຳຖາມຂ້າງເທິງນີ້ກໍໄດ້ ເຊິ່ງຄຳຕອບຕ້ອງໄດ້ຂຽນໃສ່ ຫຼື ມັນສາມາດເຮັດເປັນແບບແຟ້ມຂໍ້ມູນ ນັກຮຽນທີ່ເປັນທາງການ. ເມື່ອສ້າງແບບສອບຖາມສຳເລັດແລ້ວ ເຮົາສາມາດ (ກ) ສົ່ງໄປຫາເຮືອນຂອງນັກຮຽນ ເພື່ອໃຫ້ຂຽນຕື່ມໃສ່ແລ້ວສົ່ງຄືນໃຫ້ໂຮງຮຽນ ຫຼື ສົ່ງໃຫ້ຜູ້ນຳຊຸມຊົນ. (ຂ) ຂຽນຕື່ມໃສ່ໂດຍຄູເອງເມື່ອເວລາໄປຢ້ຽມຢາມເຮືອນນັກຮຽນ. (ຄ)ຂຽນຕື່ມໃສ່ຕາມການສຳພາດນັກຮຽນເອງ ຫຼື ສຳພາດຜູ້ປົກຄອງຂອງນັກຮຽນ ເມື່ອເວລາເຂົາເຈົ້າມາຮັບເດັກ, ເມື່ອເວລາມີກອງປະຊຸມຜູ້ປົກຄອງເດັກ ແລະ ຄູສອນ ຫຼື ເມື່ອເວລາມີກອງສະມາຄົມພໍ່ແມ່ນັກຮຽນ.

ບາດກ້າວທີ 4. ພາຍຫຼັງແບບສອບຖາມໄດ້ຖືກຂຽນສຳເລັດ ແລະ ສົ່ງຄືນມາໝົດແລ້ວ, ໃຫ້ສ້າງກໍລະນີສຶກສາແບບພັນລະນາສຳລັບເດັກນັກຮຽນແຕ່ລະຄົນ ທີ່ລວມເອົາຄຳຕອບຂອງຄຳຖາມຂ້າງເທິງ. ກໍລະນີສຶກສາອັນນີ້ ຈະຊ່ວຍທ່ານໃນການກຳນົດ, ເຊື່ອມໂຍງ ແລະ ວິເຄາະປັດໄຈທີ່ອາດມີຜົນກະທົບຕໍ່ການປະພຶດ ແລະ ການຮ່ຳຮຽນຂອງນັກຮຽນ.

ບາດກ້າວທີ 5. ພາຍຫຼັງສຳເລັດກໍລະນີສຶກສາແລ້ວ, ໃຫ້ເບິ່ງກໍລະນີສຶກສາຢ່າງຈິດຈໍ່ ເພື່ອໃຫ້ຫັນວ່າມີປັດໄຈອັນໃດ ທີ່ອາດຈະກະທົບໃສ່ຄວາມອາດສາມາດຂອງເດັກແຕ່ລະຄົນ ທີ່ຈະຮຽນໄດ້ເຕັມເມັດເຕັມໜ່ວຍຢູ່ໃນຫ້ອງຮຽນ ກໍຄືຕໍ່ການປະພຶດຂອງເຂົາເຈົ້າ. ໃຫ້ຂີດກ້ອງປັດໄຈເຫຼົ່ານັ້ນ ເພື່ອເຮັດໃຫ້ເຫັນພົ້ນເດັ່ນຂຶ້ນ ແລະ ເພື່ອຊ່ວຍທ່ານໃນການເຊື່ອມໂຍງ. ສຳລັບກໍລະນີຂອງ ນາງ ອາເຢ ຂ້າງລຸ່ມນີ້ ອັນນີ້ມັນອາດແມ່ນຄວາມແຕກຕ່າງທາງດ້ານວັດທະນະທຳ ທີ່ເປັນສາເຫດໃຫ້ ນາງ ມີຄວາມຮູ້ສຶກຖືກຈຳແນກ ແລະ ມີປີ່ມດ້ວຍ, ຄວາມຍາກຈົນ, ການເບິ່ງແຍງດູແລບໍ່ພຽງພໍ, ບໍ່ສາມາດເຂົ້າເຖິງຊັບພະຍາກອນຕ່າງໆ ຈາກພາຍນອກຂອງຄອບຄົວ, ມີສະຖານະພາບທາງ ດ້ານສຸຂະພາບ ແລະ ໂພຊະນາການຕ່ຳ. ໃຫ້ນຳໃຊ້ປັດໄຈເຫຼົ່ານີ້ ເປັນຈຸດເລີ່ມຕົ້ນ ເພື່ອສ້າງການ ກະທຳອັນດີ ເພື່ອແກ້ໄຂສາເຫດຂອງນັກຮຽນທີ່ບໍ່ມາໂຮງຮຽນ ຫຼື ປະພຶດບໍ່ເໝາະສົມຢູ່ໃນຫ້ອງ ຮຽນ. ໃຫ້ເຮັດວຽກຢ່າງຕັ້ງໜ້າຮ່ວມກັບເພື່ອນຮ່ວມງານຂອງທ່ານ, ຄະນະກຳມະການຄຸ້ມຄອງ ໂຮງຮຽນ, ຜູ້ປົກຄອງເດັກ, ຜູ້ນຳຊຸມຊົນ ແລະ ອົງການຈັດຕັ້ງຕ່າງໆໃນທ້ອງຖິ່ນ ເພື່ອວາງແຜນ, ດຳເນີນການ, ຕິດຕາມກຳກັບ ແລະ ປະເມີນຜົນການປະຕິບັດການແຕ່ລະອັນ.

ອາເຢ ເປັນຄົນ<u>ເຜົ່າມົ້ງ</u> ອາໄສຢູ່ພາກເໜືອຂອງປະເທດໄທ. ລາວຄິດວ່າດຽວນີ້ລາວອາຍຸ 9 ປີ ແຕ່ <u>ບໍ່ມີ ໜັງສືຢັ້ງຢືນການເກີດ</u>. <u>ພໍ່ຂອງລາວເສຍຊີວິດແລ້ວ</u>. ແມ່ຂອງລາວມີອາຍຸ 30 ປີ ແລະ ຍັງບໍ່ໄດ້ແຕ່ງງານ ໃໝ່. <u>ແມ່ຂອງລາວກຶກໜັງສື</u>. ອາຊີບຕົ້ນຕໍຂອງລາວແມ່ນເຮັດໄຮ່ປົນທີ່ດິນຜືນນ້ອຍໆແຫ່ງໜຶ່ງ. <u>ແມ່ຕູ້ຂອງ ລາວເປັນຜູ້ດູແລລາວ ແລະ ນ້ອງຊາຍ ອາຍຸ 5 ປີ ທີ່ບໍ່ໄດ້ເຂົ້າໂຮງຮຽນອະນຸບານ</u>. <u>ຄອບຄົວຂອງ ອາເຢ ທຸກຍາກ</u> ແລະ <u>ມີລາຍໄດ້ ຕ່ຳກວ່າ 135,000 ກີບ ຕໍ່ເດືອນ</u>. ໃນຊ່ວງໝົດລະດູເຮັດໄຮ່ <u>ແມ່ຂອງ ອາເຢ ຈະອົບພະຍົບໄປເຮັດວຽກ</u>ເປັນກຳມະກອນທີ່ກຸງເທບ. ຄອບຄົວຂອງອາເຢບໍ່ໄດ້ເປັນສະມາຊິກຂອງກຸ່ມພັດ ທະນາໃດໆຂອງບ້ານເລີຍ ແລະ <u>ບໍ່ສາມາດເຂົ້າເຖິງຊັບພະຍາກອນຂອງຊຸມຊົນ</u>. ອາເຢ ເຂົ້າຮຽນ ປ.1 ແລະ ປ.2, ແຕ່ລາວຕ້ອງອອກໂຮງຮຽນ ເມື່ອຂຶ້ນຮຽນຫ້ອງ ປ. 3 ໄດ້ບໍ່ດົນ. ແມ່ຂອງ ອາເຢ ບໍ່ມີເງິນພໍທີ່ຈະ ຊື້ຊຸດເຄື່ອງແບບນັກຮຽນ ແລະ ບໍ່ສາມາດຈ່າຍຄ່າເດີນທາງໄປໂຮງຮຽນ ເຊິ່ງຕັ້ງຢູ່ຫ່າງຈາກເຮືອນຂອງ ອາເຢ ປະມານ 25 ກິໂລແມັດ. ຕອນທີ່ ອາເຢ ໄປເຂົ້າໂຮງຮຽນ, ເຄິ່ງໜຶ່ງຂອງການຂາດຮຽນ ແມ່ນໄດ້ຮັບ ອະນຸຍາດໃນຂະນະທີ່ອີກເຄິ່ງໜຶ່ງ ແມ່ນເປັນເພາະຄວາມ<u>ເຈັບປ່ວຍ</u>. ລາວເປັນພະຍາດທາງເດີນຫາຍໃຈ ກະທັນຫັນ (Acute respiratory infections - ARI) ແລະ ຂາດສານໄອໂອດີນຂັ້ນເບົາ (Mild iodine defidiency). ອາເຢ ມັກຈະຫຼັບເວລາຢູ່ຫ້ອງຮຽນ ແລະ ມັກສົ່ງວຽກບ້ານບໍ່ທັນຕາມເວລາກຳນົດ. ມີຫຼາຍ ຄັ້ງ, ລາວຄືກັບວ່າຖືກຄອບງຳຈາກອັນໃດອັນໜຶ່ງ ແລະ ກໍບໍ່ສົນໃຈ ບົດຮຽນ ຫຼື ໝູ່ຄູ່ດ້ວຍກັນ.

ໝາຍເຫດ. ສຳລັບທ່ານທີ່ສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍ, ໃຫ້ເລີ່ມຕົ້ນໂດຍການສ້າງ ແຟ້ມຊື່ອະປະຫວັດນັກຮຽນ ທີ່ຈຳເປັນຕ້ອງເອົາໃຈໃສ່ພິເສດກ່ອນ, ອາດຈະຍ້ອນວ່າໃນປັດຈຸບັນ ເຂົາຮຽນບໍ່ໄດ້ດີ ຫຼື ມີພຶດຕິກຳຜິດໆ ຫຼື ຍ້ອນທ່ານສົງໄສວ່າສະພາບສ່ວນຕົວ ຫຼື ຄອບຄົວ ຂອງເດັກເຮັດໃຫ້ເຂົາມີຄວາມສ່ຽງຕໍ່ການປະພຶດທີ່ບໍ່ເໝາະສົມ. ຫຼັງຈາກນັ້ນຈຶ່ງຂະຫຍາຍໄປຫາ ນັກຮຽນຜູ້ອື່ນໆ.

7. ການສື່ສານ/ພົວພັນລະຫວ່າງພໍ່ແມ່ ຜູ້ປົກຄອງ - ຄູສອນ

ການສ້າງສາຍພົວພັນທີ່ດີລະຫວ່າງຄູສອນ ແລະ ນັກຮຽນ ເປັນສິ່ງໜຶ່ງທີ່ສົ່ງເສີມການປະພຶດທີ່ດີ ແລະ ປ້ອງກັນການປະພຶດທີ່ບໍ່ເໝາະສົມ, ນອກນີ້ມັນຍັງຮຽກຮ້ອງໃຫ້ດຶງເອົາພໍ່ແມ່ຜູ້ປົກຄອງນັກຮຽນເຂົ້າມີສ່ວນຮ່ວມ ຢູ່ໃນການສຶກສາຂອງລູກຫຼານຂອງຕົນອີກ. ມີປັດໄຈ 2 ຢ່າງທີ່ເຮັດໃຫ້ເດັກນັກຮຽນມີຄວາມສ່ຽງຕໍ່ການປະພຶດທີ່ບໍ່ເໝາະສົມ ແລະ ປະລະການຮຽນ ສິ່ງນັ້ນກໍຄື ການບໍ່ມີສ່ວນຮ່ວມຂອງຜູ້ປົກຄອງເດັກ ແລະ ຄວາມຄາດຫວັງຂອງພໍ່ແມ່ຜູ້ປົກຄອງເດັກຕ່ຳ. ການເຂົ້າມີສ່ວນຮ່ວມຂອງຜູ້ປົກຄອງເດັກ ຈະມີຜົນກະທົບອັນດີຕໍ່ຜົນສຳເລັດ ໃນການຮຽນຂອງເດັກນັກຮຽນ ແລະ ມັນເປັນຕົວຄາດຄະເນທີ່ແມ່ນຍຳທີ່ສຸດ ຂອງຄວາມສຳເລັດຂອງການຮຽນຂອງເດັກໃນໂຮງຮຽນ. **ຜົນປະໂຫຍດຈຳນວນໜຶ່ງທີ່ຈະໄດ້ຮັບຈາກການເຂົ້າມີສ່ວນຮ່ວມຂອງຄອບຄົວນັກຮຽນມີດັ່ງນີ້:**

- ❖ ນັກຮຽນຈະບັນລຸຜົນສຳເລັດໃນການຮຽນສູງຂຶ້ນ ໂດຍບໍ່ກ່ຽວຂ້ອງກັບສະຖານະທາງດ້ານເສດຖະກິດ-ສັງຄົມ,ຊົນເຜົ່າ,ປະຫວັດຄວາມເປັນມາ ຫຼືລະດັບການສຶກສາຂອງຜູ້ປົກຄອງ.
- ❖ ນັກຮຽນຈະບໍ່ມັກຂາດໂຮງຮຽນ.
- ❖ ນັກຮຽນຈະເຮັດວຽກບ້ານສຳເລັດຢ່າງສະໝ່ຳສະເໝີຫຼາຍຂຶ້ນ.
- ❖ ນັກຮຽນຈະສະແດງອອກທາງດ້ານພຶດຕິກຳ ແລະ ທັດສະນະຄະຕິທາງບວກຫຼາຍຂຶ້ນກວ່າເກົ່າ.

ເຖິງຢ່າງໃດກໍດີ, ສຳລັບທ່ານ, ເພື່ອຈະດຶງເອົາຜູ້ປົກຄອງເດັກ ເຂົ້າມີສ່ວນຮ່ວມຢູ່ໃນການສຶກສາຂອງລູກຫຼານຂອງເຂົາເຈົ້ານັ້ນ, ທ່ານຕ້ອງສະແດງໃຫ້ເຫັນຜົນປະໂຫຍດ ໃນຕົວຂອງເດັກ. ການວິໄຈໄດ້ ສະເໜີແນະວ່າຜູ້ປົກຄອງເດັກຈະນຳ ໃຊ້ຄວາມຮູ້ຂອງຄູກ່ຽວກັບບຸກຄະລິກ/ຈຸດພິເສດ ຫຼືຄວາມສົນໃຈຂອງເດັກນັກຮຽນເປັນເຄື່ອງມືກັ່ນກອງ. ຜູ້ປົກຄອງນັກຮຽນຈະຍິ່ງຢາກໄດ້ຍິນໄດ້ຟັງຄວາມຄິດເຫັນກ່ຽວກັບລູກຫຼານ ຖ້າເຂົາຮູ້ສຶກວ່າ ຄູຮູ້ສິ່ງໃດໜຶ່ງພິເສດກ່ຽວກັບເດັກ. ນີ້ເປັນເຫດຜົນອັນໜຶ່ງໃນຈຳນວນ ເຫດຜົນທີ່ສຳຄັນຫຼາຍໆອັນ ທີ່ວ່າເປັນຫຍັງການຮູ້ຈັກເດັກນັກຮຽນ ແລະ ຄອບຄົວຂອງເຂົາ ຈຶ່ງມີຄວາມສຳຄັນຢູ່ໃນການສ້າງສາຍພົວພັນຮ່ວມມືລະຫວ່າງຜູ້ປົກຄອງ ແລະຄູສອນ.ຍິ່ງໄປກວ່ານັ້ນ, ພິເສດແມ່ນສຳລັບໃນໝູ່ນັກຮຽນທີ່ປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນ ມາຕະຫຼອດ, ກອງປະຊຸມລະຫວ່າງຜູ້ປົກຄອງ-ຄູ-ນັກຮຽນ ຈະເຮັດໃຫ້ນັກຮຽນຢຸດເຊົາການປະພຶດຢູ່ໂຮງຮຽນ ຕ້ານກັບການປະພຶດຢູ່ເຮືອນ ແລະ ການປະພຶດກັບພໍ່ແມ່ຕ້ານກັບການປະພຶດຕໍ່ຄູ.

ໂດຍປົກກະຕິແລ້ວ, ກອງປະຊຸມຜູ້ປົກຄອງ-ຄູສອນ ຫຼື ກອງປະຊຸມຜູ້ປົກຄອງ-ຄູສອນ-ນັກຮຽນຈະຈັດຂຶ້ນ ກໍຍ້ອນເຫດຜົນໃດໜຶ່ງໃນ 4 ເຫດຜົນດັ່ງລຸ່ມນີ້:

(ກ). ເພື່ອເປີກສາຫາລືປະເດັນທາງດ້ານວິຊາການພິເສດໃດໜຶ່ງທີ່ໂຮງຮຽນຮ້ອງຂໍເຊັ່ນ: ການຮ່ຳຮຽນຂອງເດັກນັກຮຽນ (ຮຽນດີຫຼືຮຽນອ່ອນ) ຫຼື ເພື່ອຂໍຮ້ອງຜູ້ປົກຄອງເດັກ ໃຫ້ຊ່ວຍເຫຼືອຫ້ອງຮຽນ ຫຼື ໂຮງຮຽນ.

(ຂ). ເປີກສາຫາລືປະເດັນການມາໂຮງຮຽນຂອງນັກຮຽນ ຫຼືເລື່ອງການປະຕິບັດລະບຽບວິໄນ.
(ຄ). ເປີກສາຫາລືປະເດັນທີ່ຍົກຂຶ້ນມາໂດຍຜູ້ປົກຄອງເອງ.
(ງ). ເພື່ອຈັດກອງປະຊຸມປົກກະຕິ ຕາມທີ່ໄດ້ຈັດວາງໄວ້ຢູ່ໃນຕາຕະລາງການເຄື່ອນໄຫວໂຮງຮຽນ.

***ຂໍ້ສັງເກດ:ກອງປະຊຸມຜູ້ປົກຄອງ-ຄູສາມາດທີ່ຈະຈັດແບບທາງການຫຼື ແບບບໍ່ທາງການກໍໄດ້. ສຳລັບຄູທີ່ສອນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍອາດບໍ່ມີເວລາ ເພື່ອຈະພົບປະກັບພໍ່ແມ່ຂອງເດັກທຸກຄົນໄດ້ໃນວັນໜຶ່ງວັນດຽວ, ກໍຄວນຈະຈັດກອງປະຊຸມທາງການກັບພໍ່ແມ່ຜູ້ປົກຄອງເດັກທີ່ມີບັນຫາຫຍຸ້ງຍາກ. ສຳລັບນັກຮຽນຜູ້ອື່ນໆ ໃຫ້ຫາໂອກາດພົບປະເປັນໄລຍະແບບບໍ່ເປັນທາງການຕາມເວລາທີ່ສະດວກ(ສຳລັບທ່ານແລະຜູ້ປົກຄອງ). ອາດສາມາດຈັດການພົບປະຢູ່ໃນຫ້ອງຮຽນ ຫຼື ເດີ່ນໂຮງຮຽນ ເຊັ່ນ ຕອນທີ່ຜູ້ປົກຄອງເດັກມາຮັບເດັກ; ໄປພົບທີ່ເຮືອນ ຖ້າທ່ານລົງຢ້ຽມຢາມຄອບຄົວເດັກ; ຫຼື ພົບປະ ໃນມື້ທີ່ມີງານພິເສດຂອງໂຮງຮຽນ ຫຼື ຂອງບ້ານ.* **ສິ່ງສຳຄັນກ່ອນການຈັດປະຊຸມທ່ານຕ້ອງກະກຽມ ແລະ ວາງແຜນ.**

8. ຍຸດທະສາດຂອງການຊຸກຍູ້ສິ່ງເສີມ

ບາງເງື່ອນໄຂທີ່ມີຄວາມສຳຄັນພິເສດໃນການກະຕຸກຊຸກຍູ້ພຶດຕິກຳທາງບວກຂອງນັກຮຽນເຊິ່ງເປັນພາກສ່ວນໜຶ່ງຂອງຂະບວນການສ້າງຄວາມສຳພັນມີດັ່ງນີ້:

- ***ຮັກສາຄວາມຮູ້ສຶກທາງອາລົມຈິດທີ່ດີຢູ່ໃນຫ້ອງຮຽນ.*** ທ່ານປະຕິບັດ ແລະ ມີປະຕິກິລິຍາຕອບໂຕ້ຢ່າງໃດ ຕໍ່ນັກຮຽນມັນກໍຈະສະທ້ອນໃຫ້ເຫັນຢູ່ໃນການປະພຶດຂອງເຂົາເຈົ້າ.
- ***ໃຫ້ຄວາມເອົາໃຈໃສ່ແກ່ນັກຮຽນ*** ເພື່ອເພີ່ມທະວີການປະພຶດແນວທາງບວກ. ສຳລັບນັກຮຽນຜູ້ທີ່ໃຫຍ່ກວ່ານັ້ນ, ຄວາມເອົາໃຈໃສ່ຈະປະກອບດ້ວຍການຮູ້ຈັກ ແລະ ສົນໃຈໃນຊີວິດຄອບຄົວ, ໃນກິດຈະກຳຢູ່ໂຮງຮຽນ ແລະ ກິດຈະກຳອື່ນໆ ທີ່ເຮັດໃຫ້ເຂົາເຈົ້າມີຄວາມສະໜຸກສະໜານ.
- ***ໃຫ້ຄວາມຄົງທີ່ສະເໝີຕົ້ນສະເໝີປາຍ*** ໃນຮູບແບບຂອງການປະຕິບັດກິດຈະວັດປະຈຳວັນປົກກະຕິສຳລັບກິດຈະກຳ ແລະ ການປະຕິສຳພັນລາຍວັນ ເພື່ອເຮັດໃຫ້ປະສົບການ ຫຼື ສິ່ງທີ່ບໍ່ຄາດຝັນ, ສິ່ງທີ່ເປັນເລື່ອງໃນແງ່ລົບຫາກເກີດຂຶ້ນໄດ້ມີຄວາມກົດດັນໜ້ອຍລົງ.
- ***ຕອບໂຕ້ແບບສະເໝີຕົ້ນສະເໝີປາຍ*** ຕໍ່ສະພາບການປະພຶດທີ່ຄ້າຍຄືກັນບໍ່ວ່າຈະເປັນບວກ ແລະ ເປັນລົບ ເພື່ອສົ່ງເສີມການພົວພັນລະຫວ່າງຄູສອນ-ນັກຮຽນ ໃຫ້ມີຄວາມກົມກຽວກັນຫຼາຍຂຶ້ນ ແລະ ມີຜົນໄດ້ຮັບຂອງນັກຮຽນໃນທາງບວກຫຼາຍຂຶ້ນ.
- ***ມີການປັບປ່ຽນຕາມສະຖານະການຕົວຈິງໄດ້,*** ໂດຍສະເພາະແມ່ນເຮັດກັບນັກຮຽນໃຫຍ່ ແລະພວກທີ່ເປັນໄວລຸ້ນ. ໃຫ້ຟັງເຫດຜົນຟັງຜົນຂອງເຂົາ ສຳລັບການປະຕິບັດຕາມ ຫຼື ບໍ່ປະຕິບັດຕາມສິ່ງທີ່ທ່ານບອກ, ຫຼື ຕາມກົດລະບຽບຂອງຫ້ອງຮຽນແລ້ວກໍເຈລະຈາ ເພື່ອການແກ້ໄຂ. ອັນນີ້ສະແດງໃຫ້ເຫັນວ່າ ທ່ານເຫັນຄຸນຄ່າຄວາມຄິດເຫັນຂອງນັກຮຽນຂອງ

ທ່ານ ເຊິ່ງຈະສາມາດຫຼຸດຜ່ອນກໍລະນີການປະພຶດທີ່ບໍ່ເໝາະສົມອະນາຄົດ. ຍິ່ງໄປກວ່ານັ້ນການເອົານັກຮຽນ ເຂົ້າມາຮ່ວມໃນການຕັດສິນໃຈຈະຕິດພັນກັບການເສີມຂະຫຍາຍດຸນພິນິດສິລະທຳໃນໄລຍະຍາວ.

- ***ເຮັດໃຫ້ຄວາມຜິດເປັນສິ່ງຖືກຕ້ອງ.*** ໃຫ້ບອກນັກຮຽນຂອງທ່ານວ່າ "ພວກເຮົາຮຽນຮູ້ຈາກການເຮັດຜິດເທົ່ານັ້ນ. ຄູເອງກໍເຮັດຜິດທຸກໆມື້. ສະນັ້ນ, ພວກເຮົາຈຶ່ງມາເຮັດຜິດບາງຢ່າງດ້ວຍກັນດຽວນີ້". ອັນນີ້ມັນຈະເປັນການສ້າງຄູ່ຮ່ວມມືສຳລັບການຮ່ຳຮຽນ ເຊິ່ງອີງໃສ່ການນັບຖືເຊິ່ງກັນ ແລະ ກັນ.
- ***ສ້າງຄວາມເຊື່ອໝັ້ນ.*** ສິ່ງເສີມການເວົ້າດ້ວຍຕົນເອງໃນດ້ານບວກ. ບອກນັກຮຽນຂອງທ່ານ ແຕ່ລະຄົນເວົ້າກ່ຽວກັບສິ່ງທີ່ເຂົາຄິດວ່າ ເຂົາເຮັດດີໃນອັນໃດອັນໜຶ່ງ ຈະແມ່ນອັນໃດກໍໄດ້. ແລ້ວໃຫ້ ທ່ານ ນຳໃຊ້ຄຳຕອບນັ້ນໃສ່ບົດສອນຂອງທ່ານ, ໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມໃນການຊ່ວຍເຫຼືອ ທ່ານເພື່ອສິດສອນ.
- ***ສຸມໃສ່ຜົນສຳເລັດທີ່ຜ່ານມາແລ້ວ.*** ສຳລັບນັກຮຽນຜູ້ທີ່ມີທ່າອ່ຽງມີປຶ້ມດ້ວຍ ຫຼື ຢ້ານເສັ່ງຕົກ, ໃຫ້ຍ້ອງຍໍສັນລະເສີນເຂົາເຈົ້າໃນເລື່ອງຄະແນນຂອງການສອບເສັ່ງຜ່ານມາ(ຈະເປັນຄະແນນດີ ຫຼື ບໍ່ກໍຕາມ) ແລະ ກໍໃຫ້ຊຸກຍູ້ສິ່ງເສີມເຂົາເຈົ້າໃຫ້ເຮັດດີຂຶ້ນຕື່ມອີກ. ໃຫ້ເອົາໃຈໃສ່ສອນບຳລຸງພິເສດ ຫຼື ເອົາວຽກເພີ່ມເຕີມໃຫ້ ແລະ ເຮັດການຕິດຕາມ.
- ***ເຮັດໃຫ້ການຮ່ຳຮຽນມີຄວາມໝາຍສຳຄັນ.*** ໃຫ້ທ່ານດັດແກ້ວິທີການສິດສອນຂອງທ່ານ. ແທນທີ່ຈະເຮັດການບັນລະຍາຍກ່ຽວກັບຮູບເລຂາຄະນິດ, ໃຫ້ທ່ານແບ່ງນັກຮຽນອອກເປັນກຸ່ມແລ້ວບອກໃຫ້ເຂົາເຈົ້າໄປຊອກຫາຮູບເລຂາຄະນິດຮູບແບບຕ່າງໆ ເທົ່າທີ່ຈະຊອກຫາໄດ້ພາຍໃນ 15 ນາທີ ຢູ່ບໍລິເວນໂຮງຮຽນ ຫຼື ໃນຊຸມຊົນ ຖ້າກຸ່ມໃດຊະນະກໍໃຫ້ໄດ້ລາງວັນເລັກໆນ້ອຍໆ!

ບົດທີ 3

ການສ້າງສະພາບແວດລ້ອມຂອງການຮຽນຮູ້ທີ່ເປັນທາງບວກ ແລະ ມີລັກ ນະນະສະໜັບສະໜູນ

1. ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ເພື່ອຢາກໃຫ້ນັກຮຽນຂອງທ່ານໄດ້ພັດທະນາການປະພຶດດີ, ເຂົາເຈົ້າຈະຕ້ອງໄດ້ຢູ່ໃນສະພາບ ແວດລ້ອມທີ່ມີການຄຸ້ມຄອງດີ ແລະມີການຈັດຕັ້ງທີ່ດີ. ເມື່ອເວລາພວກເຮົາຄຳນຶງເຖິງການຄຸ້ມ ຄອງຫ້ອງຮຽນພວກເຮົາຫຼາຍຄົນ ອາດຄຳນຶງເຖິງການຄວບຄຸມການປະພຶດຂອງນັກຮຽນ ຫຼື ມີ ຄວາມເປັນຫ່ວງວ່າ ພວກເຮົາຈະເຮັດແນວໃດ ເພື່ອຄວບຄຸມຫ້ອງຮຽນ. ຄວາມຈິງແລ້ວປະຕິກິລິ ຍາຂອງພວກເຮົາ ຕໍ່ກັບການປະພຶດຂອງັກຮຽນ ຫຼື ຕໍ່ການປະພຶດທີ່ບໍ່ເໝາະສົມຂອງນັກຮຽນ ຄວນ ເປັນປະຕິກິລິຍາສຸດທ້າຍ ຢູ່ໃນແຜນສຳລັບການຄຸ້ມຄອງຫ້ອງຮຽນ. ຢູ່ໃນຫ້ອງຮຽນທີ່ມີການຄຸ້ມ ຄອງທີ່ດີ, ການກະທຳອັນນີ້ຈະຢູ່ໃນຮູບແບບເຕັກນິກຂອງການປະຕິບັດວິໄນແນວທາງບວກ, ຈະ ໃຊ້ເວລາພຽງໜ້ອຍດຽວ ແລະ ຈະຂັດຈັງຫວະການສອນບົດຮຽນພຽງໜ້ອຍດຽວ. ເພື່ອຢາກໄດ້ສິ່ງ ນີ້ ທ່ານມີຄວາມຈຳເປັນຕ້ອງວາງແຜນການຄຸ້ມຄອງຂອງຫ້ອງຮຽນ ທີ່ມີຫຼາຍຕົວປະກອບ.

ບາດກ້າວທຳອິດຢູ່ໃນຂະບວນການຂອງການວາງແຜນ ແມ່ນໃຫ້ຕັດສິນໃຈວ່າແມ່ນອັນ ໃດທີ່ພວກເຮົາຕີຄວາມໝາຍຂອງຄຳວ່າ “ການຄຸ້ມຄອງຫ້ອງຮຽນ”. ເມື່ອເວລາພວກເຮົານຳໃຊ້ຄຳ ເວົ້າ “ການຄຸ້ມຄອງຫ້ອງຮຽນ” ພວກເຮົາໝາຍເຖິງຂະບວນການ, ຍຸດທະສາດ ແລະ ວິທີການ ສິດສອນທີ່ຄູສອນນຳໃຊ້ເພື່ອສ້າງສະພາບແວດລ້ອມ ຫ້ອງຮຽນທີ່ສົ່ງເສີມການຮ່ຳຮຽນ ຄືການສ້າງ ແລະ ຄຸ້ມຄອງການປະພຶດ ແລະ ກິດຈະກຳຂອງການຮ່ຳຮຽນຂອງນັກຮຽນເປັນລາຍບຸກຄົນ ແລະ ເປັນກຸ່ມຢູ່ໃນສະພາບແວດລ້ອມນີ້. ດັ່ງນັ້ນ, ການຄຸ້ມຄອງຫ້ອງຮຽນທີ່ມີປະສິດທິຜົນຈຶ່ງໄດ້ສ້າງ ສະພາບແວດລ້ອມທີ່ນຳໄປສູ່ການພັດທະນາການສິດສອນສຳລັບພວກເຮົາ ແລະ ພັດທະນາການ ຮ່ຳຮຽນ ແລະ ດ້ານການປະພຶດຂອງນັກຮຽນທຸກຄົນ. ການຄຸ້ມຄອງຫ້ອງຮຽນທີ່ບໍ່ມີປະສິດທິຜົນ ມັກຈະສ້າງຄວາມຫຍຸ້ງຍາກສັບສົນເລື້ອຍໆ.ນັກຮຽນຂອງພວກເຮົາບໍ່ຮູ້ວ່າພວກເຮົາ ມີຄວາມຄາດ ຫວັງໃນຕົວຂອງເຂົາເຈົ້າແນວໃດ,ເຂົາເຈົ້າບໍ່ເຂົ້າໃຈວ່າຈະປະພຶດຕົນແນວໃດ ຫຼືຈະຕອບສະໜອງ ແນວໃດ, ເຂົາເຈົ້າບໍ່ຮູ້ຈັກຂອບເຂດຈຳກັດ ແລະ ເຂົາເຈົ້າບໍ່ຮູ້ຜົນໄດ້ຮັບອັນສຸດທ້າຍ ທີ່ອາດຈະ ເກີດຂຶ້ນສຳລັບກາປະພຶດທີ່ບໍ່ດີ. ການຄຸ້ມຄອງຫ້ອງຮຽນທີ່ມີປະສິດທິຜົນ ເປັນທັກສະທີ່ມີຄວາມ ສຳຄັນ ແລະ ຍາກທີ່ສຸດທີ່ຄູສອນໃໝ່ຈະຕ້ອງຮ່ຳຮຽນເອົາທັກສະນີ້. ແມ່ນແຕ່ຄູຜູ້ມີປະສົບການ ກໍຍັງປະເຊີນໜ້າກັບນັກຮຽນ ຫຼື ທ້າທາຍທັກສະການຄຸ້ມຄອງທີ່ມີມາແຕ່ດົນ ແລະ ຊຸກດັນໃຫ້ພວກເພີ່ນເພື່ອຊອກຫາວິທີທາງອັນໃໝ່ ເພື່ອຈັດການກັບສະພາບການຂອງຫ້ອງ ຮຽນ. ຫ້ອງຮຽນແມ່ນບ່ອນທີ່ນັກຮຽນມາເຕົ້າໂຮມກັນ ເພື່ອຮ່ຳຮຽນ. ການສ້າງສະພາບແວດລ້ອມ

ໃຫ້ມີຄວາມປອດໄພ ແລະ ເປັນລະບຽບຢູ່ໃນຫ້ອງຮຽນ ຈຶ່ງເປັນທັກສະທີ່ຈະຕ້ອງສືບຕໍ່ຄົ້ນຄິດຕໍ່ໄປ ສຳລັບຄູເພື່ອຈະໃຫ້ສະພາບແວດລ້ອມຂອງການຮ່ຳຮຽນດີທີ່ສຸດສຳລັບນັກຮຽນທຸກຄົນ.

2. ການເຮັດໃຫ້ສະພາບແວດລ້ອມຂອງການຮຽນຮູ້ ມີຄວາມສະດວກສະບາຍ

ທ່ານເຄີຍໄດ້ຮ່ຳຮຽນຢູ່ໃນຫ້ອງຮຽນທີ່ແອອັດບໍ? ອາດຈະແອອັດໂດຍມີຄົນຫຼາຍ ຫຼື ມີວັດຖຸສິ່ງຂອງຫຼາຍຢ່າງໃນຫ້ອງ ເຊັ່ນ ເຄື່ອງເຟີນີເຈີ. ຕອນທຳອິດ ທ່ານມີຄວາມຮູ້ສຶກແນວໃດ? ຫຼັງຈາກນັ້ນໄປໄດ້ໄລຍະໜຶ່ງ, ຄວາມຮູ້ສຶກທ່ານມີການປ່ຽນແປງບໍ?. ເມື່ອເຂົ້າໄປໃນຫ້ອງ, ພວກເຮົາຫຼາຍຄົນອາດມີຄວາມຕົກຕະລຶງໃນຂັ້ນຕົ້ນ, ແຕ່ເມື່ອພວກເຮົາ ຈຳເປັນຕ້ອງໄດ້ເລີ່ມຕົ້ນເຮັດວຽກຕົວຈິງຢູ່ໃນຫ້ອງ ແລະ ປະຕິສຳພັນກັບຜູ້ອື່ນໆ, ພວກເຮົາມອາດຈະເລີ່ມມີຄວາມຮູ້ສຶກທາງລົບ. ພວກເຮົາອາດຈະກາຍເປັນຄົນໝົດຫວັງ ຫຼືໃຈຮ້າຍ ຫຼືພວກເຮົາອາດຈະຖອຍອອກໄປຫາແຈຫ້ອງ ແລະ ພະຍາຍາມຫຼີກລ້ຽງສິ່ງອື່ນໆ ຫຼື ຫລີກລ້ຽງການລົ້ມ ຫຼື ກະທົບກະແທກກັບວັດຖຸຕ່າງໆຢູ່ໃນຫ້ອງ.

ໃນຫ້ອງຮຽນທີ່ບໍ່ໄດ້ຮັບການຈັດສັນທີ່ດີ, ນັກຮຽນກໍອາດຈະມີຄວາມຮູ້ສຶກສາເຊັ່ນດຽວກັນ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍຄົນ, ທ່ານຕ້ອງຈັດຫ້ອງທີ່ທ່ານສາມາດເຫັນທຸກຄົນ ແລະ ໃຫ້ພະຍາຍາມພິຈາລະນາໃຊ້ຍຸດທະສາດ ສຳຄັນ 3 ຢ່າງດັ່ງນີ້. ທຳອິດໃຫ້ຍົກຍ້າຍເຄື່ອງເຟີນີເຈີທີ່ບໍ່ຈຳເປັນອອກ. ໃຫ້ໃຊ້ສາດແທນໂຕະ, ໃຫ້ນຳໃຊ້ຖ້ານຕູ້ໃສ່ເຄື່ອງທີ່ຕິດກັບຝາຫ້ອງ ແລະ ເອົາອຸປະກອນທີ່ນັກຮຽນບໍ່ຕ້ອງການໃຊ້ເປັນປົກກະຕິນັ້ນອອກຈາກພື້ນທີ່ຫ້ອງຮຽນ. ຖ້າຫ້ອງຮຽນຂອງທ່ານມີຕູ້ສຳລັບໃສ່ເຄື່ອງຂອງສ່ວນຕົວນັກຮຽນ ໃຫ້ເອົາໄປໄວ້ຢູ່ທາງນອກຫ້ອງຮຽນ. ຖ້າເປັນໄປໄດ້ໃຫ້ເອົາສິ່ງຂອງສ່ວນຕົວ, ອຸປະກອນການສອນ ແລະ ສິ່ງຂອງອື່ນໆ ທີ່ທ່ານບໍ່ໄດ້ນຳໃຊ້ໃນເວລາສິດສອນນັ້ນໄປໄວ້ ຢູ່ໃນຫ້ອງພັກ ຜ່ອນຂອງຄູສອນ ຫຼື ເອົາໄວ້ຢູ່ໃນສະຖານທີ່ອື່ນໆ ທີ່ປອດໄພຢູ່ນອກຫ້ອງຮຽນ.

ຍຸດທະສາດອັນທີ່ສອງ ແມ່ນຕ້ອງມີຫົວຄິດປະດິດສ້າງຢູ່ໃນວິທີການສິດສອນຂອງທ່ານ ແລະ ເຮັດໃຫ້ຫ້ອງຮຽນມີການພົວພັນກັນ ເພື່ອຫຼຸດຜ່ອນຄວາມຮູ້ສຶກແອອັດ. ໃຫ້ພະຍາຍາມເຮັດການບັນລະຍາຍບົດຮຽນໃນພາກສ່ວນໃດໜຶ່ງເທົ່ານັ້ນ ເຊັ່ນ ໃຊ້ເວລາເຮັດການບັນລະຍາຍ 20 ນາທີ ສຳລັບບົດຮຽນໜຶ່ງຊົ່ວໂມງ ແລະ ໃຫ້ສຸມໃສ່ໜຶ່ງຫາສອງຫົວຂໍ້ ຫຼື ແນວຄວາມຄິດ ທີ່ສຳຄັນ (ຕົວຢ່າງເວົ້າເລື່ອງຮູບເລຂາຄະນິດ) ແທນທີ່ຈະໃຫ້ຂໍ້ມູນຂ່າວສານເປັນຈຳນວນຫຼາຍໃນຄັ້ງດຽວ. ອັນນີ້ມັນເປັນເວລາສູງສຸດ ທີ່ທ່ານຈະຮັກສາຄວາມຕັ້ງໃຈຂອງນັກຮຽນໄວ້ໄດ້, ຫຼັງຈາກນັ້ນໃຫ້ຈັດແບ່ງນັກຮຽນເປັນກຸ່ມນ້ອຍ ແທນທີ່ຈະມີຫຼາຍຄົນ. ໃຫ້ສັບປົນນັກຮຽນຍິງ-ຊາຍ ຢູ່ໃນກຸ່ມດຽວກັນ ແທນທີ່ຈະແຍກຍິງ-ຊາຍຕ່າງຫາກ. ເອົາກິດຈະກຳເພີ່ມໃຫ້ນັກຮຽນ ເຊັ່ນ ໃຫ້ກຸ່ມໜຶ່ງພະຍາຍາມຄົ້ນຄິດຮູບທີ່ເປັນວົງກົມເທົ່າທີ່ເຂົາສາມາດຄິດໄດ້ໃຫ້ກຸ່ມອື່ນໆ ຄິດເລື່ອງວັດຖຸທີ່ເປັນຮູບຈະຕຸລັດເທົ່າທີ່ເຂົາຈະຄິດໄດ້. ໃນເວລາໃກ້ຈະໝົດຊົ່ວໂມງສອນ ໃຫ້ນັກຮຽນກັບມາບ່ອນເກົ່າ ແລະ ໃຫ້ແຕ່ລະກຸ່ມນຳສະເໜີສິ່ງທີ່ເຂົາໄດ້ຮຽນຮູ້.

ຍຸດທະສາດທີ່ສາມ ແມ່ນນຳໃຊ້ເນື້ອທີ່ຢູ່ນອກຫ້ອງຮຽນເລື້ອຍໆ ເທົ່າທີ່ເປັນໄປໄດ້. ເດີ່ນໂຮງ ຮຽນສາມາດເປັນຊັບພະຍາກອນອັນອຸດົມສົ່ງມີ ເພື່ອນຳໃຊ້ເຂົ້າໃນການຮຳ່ຮຽນໃນລະບົບ. ນອກ ຫ້ອງຮຽນນັກຮຽນສາມາດຄົ້ນຄວ້າຮຽນຮູ້ໄດ້ ເຊິ່ງເປັນສ່ວນໜຶ່ງ ຂອງການຮຳ່ຮຽນຂອງເຂົາເຈົ້າ ແລະ ເຂົາເຈົ້າສາມາດຮຳ່ຮຽນດ້ວຍຄວາມມ່ວນຊື່ນ ຫຼາຍກວ່າຢູ່ໃນຫ້ອງຮຽນທີ່ແອອັດ. ເດີ່ນໂຮງ ຮຽນເປັນບ່ອນທີ່ສຳຄັນສຳລັບນັກຮຽນ ເພື່ອພັດທະນາທັກສະທາງດ້ານສັງຄົມ ແລະ ຄວາມຮູ້. ເດີ່ນໂຮງຮຽນໃຫ້ໂອກາດແກ່ທ່ານ ເພື່ອເຮັດໃຫ້ສະພາບແວດລ້ອມຂອງການຮຳ່ຮຽນຂອງນັກຮຽນ ມີຄວາມຫຼາກຫຼາຍ ແລະ ພັດທະນາບົດຮຽນໃຫ້ມີຄວາມສຳຄັນ ກ່ຽວກັບການຮ່ວມມືຊຶ່ງກັນ ແລະ ກັນ, ຄວາມເປັນເຈົ້າຕົນເອງ, ຄວາມເປັນສ່ວນຕົວ, ຄວາມນັບຖືແລະຄວາມຮັບຜິດຊອບ. ພື້ນທີ່ ຂອງເດີ່ນໂຮງຮຽນ ສາມາດນຳໃຊ້ເປັນສູນກາງຂອງກິດຈະກຳທີ່ສະໜັບສະໜູນສິ່ງທີ່ໄດ້ຮຽນກ່ຽວ ກັບວິຊາຮຽນທີ່ຮຽນຢູ່ໃນຫ້ອງຮຽນ, ຕົວຢ່າງ, ຢູ່ໃນຕົວຢ່າງກັບຮູບເລຂາຄະນິດ ຄູສາມາດບອກ ໃຫ້ນັກຮຽນຄົ້ນຄິດນຳໃຊ້ເດີ່ນໂຮງຮຽນ ແລະ ກຳນົດຮູບເລຂາຄະນິດໃຫ້ໄດ້ຫຼາຍເທົ່າທີ່ຈະເຮັດ ໄດ້. ແລ້ວນັ່ງຢູ່ໃນກ້ອງຮົ່ມຕົ້ນໄມ້ ແລະ ຂຽນຈຳນວນຮູບເລຂາຕາມຈຳນວນທີ່ເຂົາເຈົ້າໄດ້ຄົ້ນພົບ. ໃຫ້ຕິດຕາມຄວາມຄືບໜ້າຂອງເຂົາເຈົ້າກ່ອນຈະໝົດເວລາສອນ 10 ນາທີ ໃຫ້ເຕົ້າໂຮມນັກຮຽນ. ອາດຈະຢູ່ໃນຫ້ອງ ຫລື ຢູ່ນອກຫ້ອງຮຽນກໍໄດ້, ແລ້ວໃຫ້ເຂົາເຈົ້ານຳສະເໜີສິ່ງຄົ້ນພົບຂອງເຂົາ ເຈົ້າ.

ເຄື່ອງເຟີນີເຈີ. ຖ້າຫາກຫ້ອງຮຽນມີເນື້ອທີ່ພຽງພໍ, ໃຫ້ພິຈາລະນາຈັດສັນໂຕະນັກຮຽນ ໃຫ້ເປັນ ຮູບແບບແຕກຕ່າງກັນ ເຊັ່ນ ເປັນຮູບວົງມົນ ຫຼື ຮູບຕົວ “U” ສຳລັບກິດຈະກຳສົນທະນາກັນ, ຈັດໂຕະ ເຂົ້າກັນເປັນຮູບຈະຕຸລັດສຳລັບເຮັດວຽກເປັນກຸ່ມ, ຈັດເປັນແຖວສຳລັບເຮັດການກວດກາ ຫຼືວຽກເປັນລາຍບຸກຄົນ. ໃຫ້ຄຳນຶງເຖິງຄວາມສະດວກໃນການເຄື່ອນໄຫວໄປມາ ຢູ່ລະຫວ່າງ ການຈັດສັນນີ້. ສ່ວນເນື້ອທີ່ທີ່ຖືກນຳໃຊ້ເລື້ອຍໆ ແລະ ແຖວທາງຍ່າງ (ເຂດຍ່າງໄປມາ ເຊັ່ນ ທາງຍ່າງລະຫວ່າງແຖວໂຕະ) ບໍ່ຄວນໃຫ້ມີອັນໃດກີດຂວາງ ເພື່ອໃຫ້ງ່າຍແກ່ການໄປມາຫາຜູ້ ໃດຜູ້ໜຶ່ງ. ໃຫ້ພິຈາລະນານຳໃຊ້ຖ້ານໃສ່ປຶ້ມ, ໂຕະ ຫຼື ແຜ່ນພິມເພື່ອເຮັດເປັນບ່ອນນຳໃຊ້ພິເສດ ຖ້າຫາກມີຄວາມຈຳເປັນຈະຕ້ອງແບ່ງຫ້ອງຂອງທ່ານ ຫຼື ຕ້ອງການມີເນື້ອທີ່ຝາຫຼາຍຕື່ມ ເພື່ອວາງ ສະແດງຜົນການຮຽນຂອງນັກຮຽນ ກໍໃຫ້ພິຈາລະນາທາງເລືອກທີ່ມີລາຄາຖືກເຊັ່ນນຳໃຊ້ທາງດ້ານ ຫຼັງຕູ້ໃສ່ປຶ້ມ, ຜືນສາດທີ່ເຮັດດ້ວຍຜ້ ຫຼື ໄມ້ປ່ອງທີ່ນັກຮຽນ ຫລື ຜູ້ປົກຄອງນັກຮຽນເຮັດເອງ. ຜືນສາດເຫຼົ່ານີ້ຍັງສາມາດນຳໃຊ້ເພື່ອແບ່ງຂັ້ນຫ້ອງຮຽນຢູ່ໃນໂຮງຮຽນ ບ່ອນທີ່ບໍ່ມີຝາຂັ້ນຫ້ອງໄດ້ ອີກດ້ວຍ.

ສູນຕ່າງໆ: ສູນກິດຈະກຳຈະໃຫ້ໂອກາດແກ່ນັກຮຽນ ຫຼື ກຸ່ມນັກຮຽນໄດ້ເຮັດວຽກໂຄງການ ຫຼື ກິດຈະກຳດ້ວຍບາດກ້າວເດີນຂອງເຂົາເຈົ້າເອງ. ຢູ່ພາຍໃນຫ້ອງຮຽນມີຄວາມຈຳເປັນຕ້ອງສ້າງ

ສູນຂຶ້ນເພື່ອໃຫ້ມີບ່ອນວ່າງຮຽນ/ເຮັດວຽກ, ເປັນບ່ອນເກັບມ້ຽນເຄື່ອງມື ແລະ ອຸປະກອນຕ່າງໆ, ແລະ ເປັນບ່ອນເພື່ອຕິດຂໍ້ແນະນຳຕ່າງໆ. ຢູ່ໃນຫ້ອງຮຽນທີ່ແອອັດ, ສູນກິດຈຳກຳສາມາດຈັດໃສ່ໃນສະຖານທີ່ຕ່າງໆຂອງເດັ່ນໂຮງຮຽນ, ນັກຮຽນສາມາດນຳເອົາສິ່ງຂອງຈຳເປັນ ເພື່ອໄປດຳເນີນກິດ ຈະກຳຢູ່ສູນ.

ອຸປະກອນການສຶກສາ ແລະ ຊັບພະຍາກອນສຳລັບການສິດສອນ: ຈຳເປັນຕ້ອງເກັບມ້ຽນປຶ້ມແບບຮຽນ ແລະ ອຸປະກອນການສຶກສາອື່ນໆ ໄວ້ເພື່ອເຂົ້າເຈົ້າສາມາດໄປເອົາ ແລະ ເກັບມ້ຽນໄວ້ໄດ້ ງ່າຍ. ເຄື່ອງມື ເຊັ່ນ: ສໍຂາວ, ບັນທັດ, ເຈ້ຍ, ສີ ແລະ ມີດຕັດ ຈຳເປັນຕ້ອງຈັດວາງໄວ້ບ່ອນທີ່ນັກຮຽນໄປເອົາໄດ້ງ່າຍ ໂດຍບໍ່ລົບກວນຜູ້ອື່ນໆ. ອຸປະກອນການສຶກສາ, ອຸປະກອນການສິດສອນເຊັ່ນແຜ່ນກະດານດຳນ້ອຍ,ຂາຄ້ຳກະດານດຳ, ແຜນພູມ, ໂຕະນ້ອຍເຮັດວຽກຈຳເປັນຕ້ອງເກັບມ້ຽນໄວ້ ແລະ ສາມາດເອົາມານຳໃຊ້ໄດ້ແຕ່ບໍ່ໃຫ້ຄົບຫ້ອງ.

ຜົນງານຂອງນັກຮຽນ: ການເກັບຮັກສາຜົນງານຂອງນັກຮຽນ ສາມາດຖ້ວມລົ້ນໄດ້ໄວທີ່ສຸດ ຖ້າຫາກ ບໍ່ໄດ້ມີການວາງແຜນໄວ້. ມີຄູສອນຈຳນວນໜຶ່ງນຳໃຊ້ແຟ້ມແຕ່ລະຄົນ ເພື່ອເກັບຮັກສາຜົນງານຂອງນັກຮຽນ. ແຟ້ມນັ້ນອາດເຮັດຂຶ້ນສຳລັບນັກຮຽນແຕ່ລະຄົນ ແລະ ເຮັດ *ໂດຍນັກຮຽນແຕ່ລະຄົນ* ສຳລັບແຕ່ລະວິຊາ ຫຼື ສຳລັບກຸ່ມນັກຮຽນແຕ່ລະກຸ່ມ. ພື້ນທີ່ກໍມີຄວາມຈຳເປັນເພື່ອວາງສະແດງຜົນງານຂອງນັກຮຽນເຊັ່ນດຽວກັນ. ພື້ນທີ່ເຫຼົ່ານີ້ ສາມາດນຳໃຊ້ຝາຫ້ອງຮຽນ ຫຼື ມັດຫ້ອຍຜົນງານຂອງນັກຮຽນດ້ວຍສາຍເຊືອກ, ຈັບຕິດດ້ວຍເຫຼັກຂັດ, ສາຍເທັບ ຫຼື ເຂັມມຸດ. ການປະດັບປະດາຫ້ອງດ້ວຍຜົນງານຂອງນັກຮຽນ ຈະຊ່ວຍເພີ່ມຄວາມດຶງດູດໃຈຂອງຫ້ອງຮຽນ ແລະ ເຮັດໃຫ້ຫ້ອງເປັນຕາໜ້າຢາກມາຮຽນຫຼາຍຂຶ້ນ, ເຖິງແມ່ນວ່າຈະມີນັກຮຽນຈຳນວນຫຼາຍກໍຕາມ.

ການມີສ່ວນຮ່ວມຂອງນັກຮຽນ: ນັກຮຽນສາມາດຊ່ວຍເຫຼືອຫຼາຍທີ່ສຸດ ໃນການຄຸ້ມຄອງພື້ນທີ່ຫ້ອງຮຽນ ແລະ ຊ່ວຍເຫຼືອເຂົ້າເຈົ້າເພື່ອສ້າງຈິດສຳນຶກໃນຄວາມຮັບຜິດຊອບ. ນັກຮຽນສາມາດແຂວນຜົນງານຂອງເຂົ້າເຈົ້າ, ປະດິດສ້າງກະດານຂ່າວ ແລະ ເກັບມ້ຽນອຸປະກອນການສຶກສາໃນຕອນທ້າຍຊົ່ວໂມງຮຽນແຕ່ລະບົດ. ນັກຮຽນຍັງສາມາດຊ່ວຍໃນການແກ້ ໄຂບັນຫາຂອງພື້ນທີ່. ເມື່ອເວລາມີບັນຫາເກີດຂຶ້ນ ເຊັ່ນ ນັກຮຽນຕຳຊູນກັນ ຫຼື ບໍ່ມີບ່ອນນັ່ງພຽງພໍ ກໍບອກໃຫ້ ນັກຮຽນສະເໜີແນະວິທີແກ້ໄຂ.

ໃຫ້ຈື່ຈຳໄວ້ວ່າ:ລະບຽບວິໄນທີ່ດີ ແລະ ການສ້າງການປະພຶດຂອງນັກຮຽນໃນທາງບວກ ຈະບັງເກີດຂຶ້ນຖ້າຫາກວ່າຫ້ອງຮຽນຂອງທ່ານ ແລະ ກິດຈະກຳຂອງຫ້ອງຮຽນໄດ້ຈັດເປັນໂຄງຮ່າງ ແລະ ມີການ ຈັດສັນ ເພື່ອຊຸກຍູ້ ສົ່ງເສີມພຶດຕິກຳແບບຮ່ວມມືກັນ ລະຫວ່າງ ນັກຮຽນ ແລະຕົວທ່ານເອງ.

3. ການສ້າງກິດຈະວັດປະຈຳຫ້ອງໃນຫ້ອງຮຽນ

ເມື່ອໃດຫາກທ່ານ ໄດ້ສ້າງແຜນປະຕິບັດ/ກິດຈະວັດປະຈຳວັນຂອງຫ້ອງຮຽນ, ໂອກາດທີ່ນັກຮຽນຈະປະພຶດແນວບໍ່ດີກໍຫລຸດລົງ ເພາະວ່ານັກຮຽນຂອງພວກເຮົາຮູ້ຈັກວ່າອັນໃດ ທີ່ເຂົາຖືກຄາດຫວັງຈາກຕົວເຂົາ ແລະ ອັນໃດທີ່ເຂົາຄາດຫວັງວ່າຈະເຮັດ. ນັກຮຽນຍັງຊ່ອຍເຫຼືອພວກເຮົາ ເພື່ອຫຼີກລ້ຽງ “ການເອີ້ນຜິດ” ເຊິ່ງເປັນການຕີຄວາມໝາຍຜິດຕໍ່ພຶດຕິກຳຂອງນັກຮຽນວ່າເປັນການປະພຶດທີ່ບໍ່ເໝາະສົມ, ຕົວຢ່າງ: ນັກຮຽນບໍ່ຮູ້ວ່າຕ້ອງແຫລມສໍດຳ ຫຼັງຈາກຮຽນແລ້ວບໍ່ແມ່ນໃນເວລາກຳລັງຮຽນ ຫຼື ວ່າ ຢ່າງໜ້ອຍ ກໍຕ້ອງຍົກມືຂຶ້ນເພື່ອຂໍອະນຸຍາດ. ຍິ່ງໄປກວ່ານັ້ນ ຖ້າຫາກນັກຮຽນຮູ້ຈັກບາດກ້າວອັນຈຳເປັນ ເພື່ອສຳເລັດວຽກສະເພາະໃດໜຶ່ງ ເຂົາກໍອາດສາມາດເຮັດສຳເລັດສົມບູນໄດ້ຕາມລຳລັບ. ໃຫ້ທ່ານສ້າງແຜນ ສຳລັບກິດຈະກຳເຫຼົ່ານີ້ ໃຫ້ສອດຄ່ອງສຳລັບພື້ນທີ່ວ່າງຂອງທ່ານ ແລະ ຮູບແບບຄຸ້ມຄອງຂອງທ່ານ (ພວກເຮົາຈະສົນທະນາໃນຂ້າງລຸ່ມນີ້). ຖ້າຫາກກິດຈະວັດປະຈຳບໍ່ມີປະສິດທິຜົນ, ໃຫ້ເອົານັກຮຽນຂອງທ່ານເຂົ້າມາຮ່ວມ ໃນການອອກແບບຄືນໃໝ່. ນີ້ຄືບາງກິດຈະວັດປະຈຳວັນທີ່ທ່ານ ແລະ ນັກຮຽນຂອງ ທ່ານ ສາມາດວາງແຜນດ້ວຍກັນ.

ການເຄື່ອນໄຫວ. ໃຫ້ສ້າງແຜນສຳລັບການເຂົ້າ ແລະ ການອອກຫ້ອງຮຽນ ກໍຄືການປ່ຽນແປງການຈັດສັນຫ້ອງຮຽນ ໂດຍອີງຕາມວິຊາທີ່ຈະສອນ ເຊັ່ນ ການເຄື່ອນຍ້າຍການຈັດສັນຫ້ອງທັງໝົດໃຫ້ເປັນກຸ່ມນ້ອຍ ສຳລັບເຮັດການກວດກາວິຊາສິລະປະ ຫຼື ວິຊາວິທະຍາສາດ. ນອກນີ້ ທ່ານຍັງຕ້ອງວາງແຜນ ເພື່ອສາມາດຕອບສະໜອງຄວາມຕ້ອງການທີ່ຈຳເປັນ/ພິເສດຂອງນັກຮຽນສ່ວນບຸກຄົນ ເຊັ່ນ ເມື່ອຕ້ອງການແຫຼມສໍ ຫຼື ຕ້ອງການເອົາເຄື່ອງ ໃຊ້ສ່ວນຕົວສຳລັບຮ່ຳຮຽນ ເຊັ່ນ ອຸປະກອນການແຕ້ມ.

ກິດຈະກຳນອກຫຼັກສູດການສອນ. ວຽກງານເຫຼົ່ານີ້ປະກອບມີກິດຈະກຳຕ່າງໆ ເຊັ່ນ ບັນທຶກຈຳນວນຄົນທີ່ມາຮຽນ, ເກັບກຳໃບອະນຸຍາດ ຫຼື ບັນຊີຄົນຂາດ ແລະ ຮັກສາຄວາມເປັນລະບຽບຮຽບຮ້ອຍຂອງຫ້ອງຮຽນ. ເມື່ອໄດ້ຮັບອະນຸຍາດ, ນັກຮຽນຈະສາມາດຊ່ອຍເຮັດວຽກ ຫຼື ກິດຈະກຳເຫຼົ່ານີ້ ແລະ ພິເສດແມ່ນນັກຮຽນຜູ້ທີ່ມີຄວາມຮູ້ສຶກວ່າ ເຂົາເຈົ້າຕ້ອງການຄວາມເອົາໃຈໃສ່. ກິດຈະກຳເຫຼົ່ານີ້ຈຳນວນ ໜຶ່ງສາມາດນຳໃຊ້ເປັນກິດຈະກຳການຮ່ຳຮຽນໄດ້ເຊັ່ນກັນ ເຊັ່ນ ຄິດໄລ່ເປີເຊັນຂອງນັກຮຽນຜູ້ທີ່ມາຫ້ອງຮຽນ ໃນມື້ທີ່ກຳລັງສອນວິຊາຄະນິດສາດ.

ການຄຸ້ມຄອງ ແລະ ການເຄື່ອນຍ້າຍວັດຖຸອຸປະກອນ. ຖ້າຫາກກິດຈະວັດປະຈຳວັນໄດ້ຖືກສ້າງຂຶ້ນ ສຳລັບການແຈກຢາຍ, ການເກັບທ້ອນ ແລະ ການເກັບມ້ຽນອຸປະກອນການສິດສອນ ແລະຮ່ຳຮຽນ, ນັກຮຽນຈະສາມາດຊ່ອຍເຮັດວຽກດັ່ງກ່າວສຳເລັດຢ່າງວ່ອງໄວ. ຖ້າຫາກອຸປະກອນໄດ້ຖືກກະກຽມ ແລະ ຈັດສັນໄວ້ລ່ວງໜ້າ, ການເຄື່ອນຍ້າຍໃນລະຫວ່າງເຮັດກິດຈະກຳຈະຄ່ອງ

ແຄ້ວ ແລະ ໃຊ້ເວລາໜ້ອຍ. ອຸປະກອນທີ່ຈຳເປັນອາດຈະຖືກຂຽນໄວ້ຢູ່ໃນຕາຕະລາງປະຈຳວັນ ເພື່ອໃຫ້ນັກຮຽນໄດ້ຮູ້ວ່າອັນໃດມີຄວາມຈຳເປັນ ແລະ ສາມາດກະກຽມສຳລັບກິດຈະກຳໜຶ່ງໆ. ໃນຂະນະທີ່ອຸປະກອນສຳລັບກິດຈະກຳ ທີ່ແລ້ວໄປນັ້ນ ກໍຈະຖືກເກັບມ້ຽນໄວ້ ຫຼື ເຕົ້າໂຮມໄວ້.

ການເຮັດວຽກເປັນກຸ່ມ. ການເຮັດວຽກເປັນກຸ່ມຈະສົ່ງເສີມການຮ່ຳຮຽນແບບຮ່ວມມືກັນ. ການເຮັດວຽກເປັນກຸ່ມຈະສອນໃຫ້ນັກຮຽນຮູ້ເຮັດວຽກຮ່ວມກັນ ແລະ ໄດ້ຮຽນຮູ້ຄຸນຄ່າຂອງການເຮັດວຽກເປັນທີມ. ສະມາຊິກທີມງານພາຍໃນກຸ່ມຄວນມີວຽກເຮັດ, ແລະ ນັກຮຽນແຕ່ລະຄົນຄວນມີໂອກາດ ເພື່ອເຮັດວຽກແຕ່ລະອັນຕະຫຼອດເວລາ. ໂດຍສົມທົບກັບນັກຮຽນຂອງທ່ານ, ໃຫ້ທ່ານສ້າງຂໍ້ກຳນົດໜ້າວຽກ ແລະ ກິດຈະວັດປະຈຳວັນເພື່ອມອບວຽກໃຫ້ນັກຮຽນເຮັດ. ວຽກທີ່ມອບໃຫ້ນັ້ນ ອາດຈະເປັນຜູ້ອຳນວຍຄວາມສະດວກ(facilitaotr), ເປັນຜູ້ຈັບເວລາ, ເປັນຜູ້ລາຍງານ ເປັນຜູ້ບັນທຶກ, ເປັນຜູ້ຊຸກຍູ້, ເປັນຜູ້ຕັ້ງ ຄຳຖາມ, ເປັນຜູ້ຄຸ້ມຄອງອຸປະກອນ ຫຼື ຜູ້ຄຸມງານ.

4. ການສ້າງລະບຽບຫ້ອງຮຽນ ຮ່ວມກັບນັກຮຽນ ແລະ ຜູ້ປົກຄອງ

ຫ້ອງຮຽນທຸກໆຫ້ອງຈຳເປັນຕ້ອງມີກິດລະບຽບ ເພື່ອໃຫ້ເຮັດໜ້າທີ່ໄດ້ຢ່າງມີປະສິດທິຜົນ. ບາງຄັ້ງ “ກິດລະບຽບ” ນີ້ເອີ້ນວ່າ “ຄວາມຄາດຫວັງ” ຫຼື “ມາດຖານການປະພຶດ”.

ລັກສະນະທຳມະຊາດຂອງກິດລະບຽບຫ້ອງຮຽນ, ກິດຈະກຳປະຈຳວັນ ແລະ ວິທີການສ້າງແມ່ນປ່ຽນແປງໄປຕາມລະບົບຄວາມເຊື່ອຂອງຄູສອນ. ພວກເຮົາຈະເຮັດວຽກຮ່ວມກັບນັກຮຽນຢູ່ໃນຫ້ອງຮຽນແນວໃດ, ລວມທັງການສ້າງກິດລະບຽບ ແລະ ກິດຈະວັດປະຈຳວັນນັ້ນ ແມ່ນຂຶ້ນກັບຄວາມເຊື່ອຂອງພວກເຮົາ ກ່ຽວກັບເລື່ອງທີ່ວ່ານັກຮຽນຮູ້ວິທີປະພຶດຄືແນວໃດ. ໃນຂໍ້ໜຶ່ງພວກເຮົາບາງຄົນອາດເຊື່ອວ່າ ນັກຮຽນ ເປັນຜູ້ຮັບເອົາຄວາມຮູ້ແບບບໍ່ຈູບຈ້າວຫ້າວຫັນ ແລະ ເຂົາເຈົ້າຈຳເປັນຕ້ອງເຮັດຕາມລະບົບ ແລະ ໃຫ້ ເຫັນສິ່ງທີ່ຈະໄດ້ຮັບ ຫຼື ຜົນປະໂຫຍດຂອງການຮ່ຳຮຽນຂອງເຂົາເຈົ້າຢ່າງຈະແຈ້ງ. ຈາກຜົນດັ່ງກ່າວ ພວກເຮົາອາດເນັ້ນໜັກໃສ່ກິດລະບຽບ ແລະ ກິດຈະວັດປະຈຳວັນທີ່ໝັ້ນຄົງມີມາດຕະຖານ. ໃນອີກຂໍ້ໜຶ່ງ, ພວກເຮົາຈຳນວນໜຶ່ງອາດ ເຊື່ອວ່ານັກຮຽນມີຄວາມຫ້າວຫັນ, ສ້າງສັນ, ກະຕືລືລົ້ນ ແລະ ເປັນຜູ້ແກ້ ບັນຫາທີ່ເປັນເອກະລັກ. ດັ່ງນັ້ນໃນກໍລະນີດັ່ງກ່າວ ພວກເຮົາອາດເນັ້ນໜັກໃສ່ການໃຫ້ທາງເລືອກແກ່ນັກຮຽນພວກເຮົາ. ເມື່ອພວກເຮົາສ້າງລະບຽບ ແລະ ກິດຈະວັດປະຈຳວັນຂອງຫ້ອງຮຽນ *ດ້ວຍການເຂົ້າ ຮ່ວມຂອງນັກຮຽນ,* ພວກເຮົາຈະສາມາດນຳໃຊ້ວິທີການ “ເດີນຕາມທາງສາຍກາງ”ຫຼາຍຂຶ້ນ ເຊິ່ງສາມາດດັດສົມ ຫຼື ປັບປ່ຽນໃຫ້ສອດຄ່ອງ ເພື່ອຕອບສະໜອງໄດ້ກັບສະພາບການທີ່ມີຄວາມແຕກຕ່າງຫຼາກຫຼາຍ ແລະ ມີການປ່ຽນແປງເລື້ອຍໆ ຢູ່ໃນຫ້ອງຮຽນຂອງພວກເຮົາ.

ແນວທາງທົ່ວໄປ ສຳລັບການພັດ ທະນາກິດລະບຽບປະກອບມີ ດັ່ງລຸ່ມນີ້:

- ❖ ໃຫ້ສ້າງລະບຽບສັ້ນໆຈັກສາມສີ່ຂໍ້ທີ່ເນັ້ນໃສ່ການປະພຶດທີ່ເໝາະສົມ; ບໍ່ມີຜູ້ໃດນັບທັງຕົວ ທ່ານ ແລະ ນັກຮຽນຂອງທ່ານຈະຈົດຈຳລະບຽບທີ່ຍາວຍືດ. ໃຫ້ຕິດລະບຽບນັ້ນໄວ້ຢູ່ ໃນຫ້ອງຮຽນ ເພື່ອໃຫ້ທຸກຄົນໄດ້ເຫັນ.
- ❖ ໃຫ້ພິຈາລະນາການສ້າງກົດລະບຽບ ຫຼື ການວາງຄາດໝາຍສຳລັບປະເດັນຕໍ່ໄປນີ້ເພື່ອ ເຮັດ ໃຫ້ ຫ້ອງຮຽນດຳເນີນໜ້າທີ່ໄປຢ່າງລຽບລື້ນ. (ກ) ໃນຕອນເລີ່ມຕົ້ນ ແລະ ຕອນທ້າຍ ຂອງຊ່ວງເວລາໃດໜຶ່ງ ຫຼື ຂອງມື້ຮຽນລວມທັງເລື່ອງການເຂົ້າມາຮຽນຕ້ອງເຮັດແນວໃດ ແລະ ສິ່ງທີ່ນັກຮຽນຄວນເຮັດ ຫຼື ບໍ່ຄວນເຮັດໃນຊ່ວງເວລານີ້, (ຂ) ໃຫ້ນຳໃຊ້ວັດຖຸ ແລະ ອຸປະກອນ, (ຄ) ວິທີຂໍອະນຸຍາດ ສຳລັບ ຄວາມຕ້ອງການທີ່ບໍ່ໄດ້ຄາດຫວັງໄວ້ (ເຊັ່ນ ໄປຫ້ອງນ້ຳ ຫຼື ແຫຼມສໍ),(ງ)ຂະບວນການດຳເນີນການຮຽນຢູ່ກັບບ່ອນນັ່ງ ແລະ ຢູ່ໃນກຸ່ມ ເປັນເອກະລາດ (ຈ) ວິທີຕັ້ງຄຳຖາມ ແລະ ຕອບຄຳຖາມ.
- ❖ ໃຫ້ເລືອກເອົາກົດລະບຽບທີ່ເຮັດໃຫ້ສະພາບແວດລ້ອມຫ້ອງຮຽນເປັນລະບຽບ ແລະ ສິ່ງ ເສີມການຮ່ຳຮຽນໃຫ້ໄດ້ຮັບຜົນສຳເລັດ. ການປະພຶດຈຳນວນໜຶ່ງເຊັ່ນ ການຫຍຳ້ຊິງງັມ ຫຼືການເຄື່ອນໄຫວເລັກໆນ້ອຍ ທີ່ມີລັກສະນະລົບກວນຜູ້ອື່ນ ນັ້ນບາງທີກໍອາດຈະບໍ່ອຸປະ ສັກທີ່ສຳຄັນຕໍ່ການຮ່ຳຮຽນ ເວັ້ນເສຍແຕ່ວ່າເຂົາເຈົ້າບົນແຊວ ຫຼື ລົບກວນ.
- ❖ ຢ່າໄດ້ສ້າງກົດລະບຽບຂອງຫ້ອງຮຽນທີ່ ທ່ານ ບໍ່ມີຄວາມສະໝັກໃຈ ຫຼື ບໍ່ສາມາດປະຕິບັດ ໄດ້ ເພື່ອ ບັງຄັບຕະຫຼອດໄປ.
- ❖ ໃຫ້ສ້າງກົດລະບຽບທີ່ຈະແຈ້ງ ແລະ ສາມາດເຂົ້າໃຈໄດ້ເທົ່າທີ່ເປັນໄປໄດ້. ກົດລະ ບຽບຄວນຂຽນໃນຮູບແບບພຶດຕິກຳ: “ໃຫ້ນັ່ງກອດແຂນ ແລະ ນັ່ງຢູ່ຊື່ໆ”ຈະເປັນປະໂຫຍກ ທີ່ຈະແຈ້ງ ແລະ ຄວນຂຽນຂໍ້ຄວາມທີ່ມີລັກສະນະທາງບວກກວ່າການໃຊ້ຄຳວ່າ “ຢ່າຕີກັນ ຫຼື ບໍ່ໃຫ້ຕີກັນ”
- ❖ ໃຫ້ຄັດເລືອກເອົາກົດລະບຽບທີ່ທຸກຄົນຕົກລົງເຫັນດີເປັນເອກະພາບນຳກັນ ຫຼື ຖືຕາມຄຳ ເຫັນດີ ຂອງທຸກໆຄົນຢູ່ໃນໂຮງຮຽນ. ຖ້າຫາກນັກຮຽນໄດ້ຮຽນຮູ້ວ່າ ເຂົາເຈົ້າບໍ່ສາມາດ ປະພຶດຕາມແນວ ທາງທີ່ລະບຽບວາງໄວ້ຢູ່ໃນຫ້ອງຮຽນຂອງທ່ານ, ແຕ່ວ່າຢູ່ຫ້ອງອື່ນ ຊຳ້ພັດສາມາດເຮັດໄດ້, ເຂົາຈະທົດລອງເຮັດໜ້ອຍໜຶ່ງ ເພື່ອເບິ່ງວ່າເຂົາຈະສາມາດປະ ພຶດແນວບໍ່ດີນັ້ນໄປໄດ້ຫຼາຍເທົ່າໃດ “ໂດຍບໍ່ໃຫ້ໄດ້ຖືກຈັບ”.
- ❖ ໃຫ້ທົບທວນກວດເບິ່ງກົດລະບຽບຫ້ອງຮຽນໃຫ້ເປັນປົກກະຕິ ເພື່ອເບິ່ງວ່າມີອັນໃດບໍ່ຈຳ ເປັນອີກ ແລ້ວ. ຖ້າມີອັນໃດບໍ່ຈຳເປັນອີກແລ້ວ, ກໍໃຫ້ຍ້ອງຍໍຊົມເຊີຍນັກຮຽນ ແລະ ບອກເຂົາເຈົ້າ ຖ້າວ່າມີກົດລະບຽບອັນອື່ນອີກທີ່ຈຳເປັນຕ້ອງປະຈຸບັດ.

ການເຂົ້າຮ່ວມຂອງຜູ້ປົກຄອງ.

ກົດລະບຽບຈະມີປະສິດທິຜົນຫຼາຍທີ່ສຸດເມື່ອຄູສອນ, ຜູ້ປົກຄອງນັກຮຽນ ແລະ ນັກຮຽນມີ ພັນທະສະເໝີພາບໃນການສົ່ງເສີມການປະຕິບັດ ແລະ ຮັກສາກົດລະບຽບນັ້ນ. ຢູ່ໃນບາງໂຮງ

ຮຽນ “ຄວາມເປັນປຶກແຜ່ນ” ໄດ້ຖືກສ້າງຂຶ້ນຈາກທຸກພາກສ່ວນເຫຼົ່ານີ້. “ຄວາມເປັນປຶກແຜ່ນ” ແມ່ນຂໍ້ຕົກລົງ ຫຼື ສັນຍາທີ່ເປັນທາງການແບບງ່າຍດາຍ ທີ່ໄດ້ເວົ້າຢ່າງຈະແຈ້ງເຖິງຄວາມຮັບຜິດຊອບສະເພາະຂອງແຕ່ລະພາກສ່ວນ ແລະ ເຊັນຮັບຮອງໂດຍເຂົາເຈົ້າເອງ. ຂໍ້ຄວາມຂອງຄວາມເປັນປຶກແຜ່ນອາດເຮັດເປັນແບບຟອມ ດັ່ງຕໍ່ໄປນີ້. ພວກເຮົາອາດສາມາດສົນທະນາອະພິປາຍໃນກອງປະຊຸມຄັ້ງທຳອິດຂອງສະມາຄົມພໍ່ແມ່ນັກຮຽນ ແລະ ຄູ, ຫຼື ກອງປະຊຸມລະຫວ່າງຜູ້ປົກຄອງ-ນັກຮຽນ-ຄູ. ທ່ານສາມາດປັບ ແລະ ນຳໃຊ້ມັນໃຫ້ເປັນວິທີນຳເອົານັກຮຽນ ແລະ ຜູ້ປົກຄອງເຂົ້າ ຮ່ວມ ຢູ່ໃນການສົ່ງເສີມການປະພຶດທີ່ດີຢູ່ໃນຫ້ອງຮຽນໄດ້ບໍ?

ໃນຖານະເປັນພໍ່ແມ່/ ຜູ້ປົກຄອງນັກຮຽນ, ຂ້ອຍຈະ:

- ❖ ສະແດງຄວາມນັບຖື ແລະສະໜັບສະໜູນຊ່ວຍເຫຼືອເດັກຂອງຂ້ອຍ, ຄູສອນ ແລະ ໂຮງຮຽນ.
- ❖ ສະໜັບສະໜູນນະໂຍບາຍດ້ານລະບຽບວິໄນ ແລະ ກົດລະບຽບຫ້ອງຮຽນຂອງເດັກຂ້ອຍ.
- ❖ ສະໜອງສະຖານທີ່ໆມີດງຽບ ແລະ ມີໄຟແຈ້ງດີ ເພື່ອໃຫ້ເດັກໄດ້ຮຽນ ແລະ ຂ້ອຍຈະຊຸຍ້ຊ່ວຍເຫຼືອການເຮັດວຽກບ້ານໃຫ້ສຳເລັດ.
- ❖ ເຂົ້າຮ່ວມກອງປະຊຸມຜູ້ປົກຄອງນັກຮຽນ-ຄູສອນ ຫຼື ກອງປະຊຸມຜູ້ປົກຄອງນັກຮຽນ-ຄູສອນ -ນັກ ຮຽນ ທີ່ຈັດຂຶ້ນຢ່າງເປັນທາງການ ແລະ ບໍ່ເປັນທາງການ.
- ❖ ໃນແຕ່ລະມື້, ໂອ້ລົມນຳເດັກຂອງຂ້ອຍ ກ່ຽວກັບກິດຈະກຳຂອງໂຮງຮຽນຂອງລາວ.
- ❖ ຕິດຕາມກຳກັບການເບິ່ງລາຍການໂທລະທັດຂອງເດັກ ຫຼື ກິດຈະກຳອື່ນໆທີ່ອາດມີຜົນເສຍຕໍ່ເວລາຮຽນຂອງເດັກ.
- ❖ ໃນແຕ່ລະພາກຮຽນ,ໃຫ້ການສະໜັບສະໜູນກິດຈະກຳຂອງໂຮງຮຽນ ຫຼື ກິດຈະກຳຫ້ອງຮຽນຢ່າງໜ້ອຍ ໜຶ່ງກິດຈະກຳ.
- ❖ ແຕ່ລະມື້, ອ່ານປຶ້ມນຳເດັກ 10 ນາທີຫຼືໃຫ້ເດັກອ່ານໃຫ້ຂ້ອຍຟັງ.

ໃນຖານະຂ້ອຍເປັນນັກຮຽນ, ຂ້ອຍຈະ:

- ○ ພະຍາຍາມເຮັດວຽກ/ຮຽນຈົນສຸດຄວາມສາມາດສະເໝີ.
- ○ ຈະເປັນຄົນທີ່ໃຈດີ ມີຄວາມກະລຸນາ ແລະຊ່ວຍເຫຼືອເພື່ອນຮ່ວມຫ້ອງຮຽນ.
- ○ ສະແດງຄວາມນັບຖືຕົນເອງ, ນັບຖືຄູຂອງຕົນ, ນັບຖືໂຮງຮຽນ ແລະຜູ້ອື່ນໆ.
- ○ ປະຕິບັດຕາມກົດລະບຽບຂອງຫ້ອງຮຽນ ແລະໂຮງຮຽນ.
- ○ ສະແດງຄວາມນັບຖືຊັບສົມບັດຂອງຫ້ອງຮຽນ ແລະໂຮງຮຽນ ດ້ວຍການບໍ່ລັກ ຫຼື ບໍ່ທຳລາຍ.
- ○ ມາໂຮງຮຽນໂດຍມີການກະກຽມວຽກບ້ານ ແລະອຸປະກອນການຮຽນ.
- ○ ມີຄວາມເຊື່ອໝັ້ນວ່າຂ້ອຍສາມາດຮຽນ ແລະຈະຮ່ຳຮຽນ.
- ○ ໃນແຕ່ລະມື້ໃຊ້ເວລາຢ່າງໜ້ອຍ 15 ນາທີ ເພື່ອຮຽນ ຫຼື ອ່ານຢູ່ເຮືອນ.

- ເວົ້າລົມນຳຜູ້ປົກຄອງຂອງຂ້ອຍໃນແຕ່ລະມື້ກ່ຽວກັບກິດຈະກຳຂອງໂຮງຮຽນຂອງຂ້ອຍ.

ໃນຖານະເປັນຄູສອນ, ຂ້ອຍຈະ:

- ❖ ສະແດງຄວາມນັບຖືນັກຮຽນແຕ່ລະຄົນ ແລະຄອບຄົວຂອງເຂົາເຈົ້າ.
- ❖ ນຳໃຊ້ເວລາຂອງການຮ່ຳຮຽນໃຫ້ມີປະສິດທິຜົນ.
- ❖ ເຮັດໃຫ້ສະພາບແວດລ້ອມມີຄວາມປອດໄພ ແລະສະດວກສະບາຍເພື່ອການຮ່ຳຮຽນ.
- ❖ ຊ່ວຍເຫຼືອໃຫ້ນັກຮຽນເຕີບໃຫຍ່ຂະຫຍາຍຕົວ ໄປຕາມຂີດຄວາມສາມາດສູງສຸດຂອງເຂົາເຈົ້າ.
- ❖ ເອົາກິດຈະກຳວຽກບ້ານທີ່ມີຄວາມໝາຍສຳຄັນ ແລະເໝາະສົມໃຫ້ນັກຮຽນ.
- ❖ ສະໜອງການຊ່ວຍເຫຼືອອັນຈຳເປັນແກ່ຜູ້ປົກຄອງນັກຮຽນ ເພື່ອໃຫ້ສາມາດຊ່ວຍເຫຼືອວຽກທີ່ມອບໝາຍໃຫ້ເດັກເຮັດ.
- ❖ ບັງຄັບໃຊ້ກົດລະບຽບຂອງໂຮງຮຽນ ແລະ ຫ້ອງຮຽນຢ່າງຍຸຕິທຳ ແລະ ສະເໝີຕົ້ນສະເໝີປາຍ.
- ❖ ລາຍງານການປະເມີນຜົນຂອງຄວາມກ້າວໜ້າ ແລະ ຜົນສຳເລັດຂອງການຮຽນທີ່ຊັດເຈນໃຫ້ແກ່ນັກຮຽນ ແລະຜູ້ປົກຄອງນັກຮຽນ.
- ❖ ນຳໃຊ້ກິດຈະກຳພິເສດຢູ່ໃນຫ້ອງຮຽນ ເພື່ອເຮັດໃຫ້ການຮ່ຳຮຽນມີຄວາມມ່ວນຊື່ນ.
- ❖ ສະແດງໃຫ້ເຫັນພຶດຕິກຳທີ່ເປັນມືອາຊີບ ແລະ ທັດສະນະຄະຕິອັນຖືກຕ້ອງ.

ນັບແຕ່ບັດນີ້ເປັນຕົ້ນໄປ, ພວກເຮົາຈະເຮັດວຽກຮ່ວມກັນ ເພື່ອປະຕິບັດຂໍ້ສັນຍານີ້.

ເຊັນໂດຍ:

ລາຍເຊັນຜູ້ປົກຄອງ / ວັນທີ

ລາຍເຊັນນັກຮຽນ / ວັນທີ

ລາຍເຊັນຄູສອນ / ວັນທີ

---

5. ມາດຖານສຳລັບການປະພຶດ ແລະ ການຄຸ້ມຄອງທີ່ດີ

ກິດລະບຽບຂອງຫ້ອງຮຽນໄດ້ຈັດມາດຖານຂອງການປະພຶດ ສຳລັບນັກຮຽນຂອງພວກເຮົາໄວ້, ແຕ່ວ່າພວກເຮົາໃນຖານະເປັນຄູສອນຕ້ອງມີມາດຖານເໝືອນກັນ. ຫຼັງຈາກນັ້ນ ພວກເຮົາທັງໝົດກໍເປັນຕົວຢ່າງ ຫຼື ຕົວແບບອັນສຳຄັນ ໃຫ້ແກ່ນັກຮຽນຂອງພວກເຮົາ.

- ❖ ພວກເຮົາຄວນບອກນັກຮຽນວ່າ ພວກເຮົາຄາດຫວັງໃຫ້ແຕ່ລະຄົນປະພຶດຢູ່ໃນຫ້ອງຮຽນແນວໃດ (ນັກຮຽນຂອງພວກເຮົາ ແລະ ພວກເຮົາເອງ) ແລະ ສົນທະນາຄວາມຄາດຫວັງນີ້ເປັນປະຈຳ.
- ❖ ພວກເຮົາຕ້ອງແຈ້ງກົດລະບຽບຂອງຫ້ອງຮຽນຂອງພວກເຮົາ ໃຫ້ຜູ້ບໍລິຫານໂຮງຮຽນ, ຄູສອນຜູ້ອື່ນໆ ແລະ ຜູ້ປົກຄອງນັກຮຽນໄດ້ຮັບຊາບນຳ ເພື່ອພວກເພິ່ນຈະສາມາດຕິດຕາມກຳກັບ ແລະ ຫຼີກລ້ຽງຄວາມຂັດແຍ່ງກັບພວກເຂົາ.
- ❖ ກົດລະບຽບທີ່ສ້າງຂຶ້ນຮ່ວມກັບນັກຮຽນຂອງພວກເຮົາຕ້ອງຖືກນຳໃຊ້ຢ່າງສະເໝີຕົ້ນສະເໝີປາຍໂດຍບໍ່ມີການເຂົ້າຂ້າງອອກຂາ.
- ❖ ພວກເຮົາຕ້ອງຮັບຊາບສິ່ງທີ່ເກີດຂຶ້ນຢູ່ໃນ ແລະ ນອກຫ້ອງຮຽນຢ່າງສະໝ່ຳສະເໝີ. ການຕິດ ຕາມກຳກັບຂອງພວກເຮົາຕ້ອງປົດລັບ ແລະ ມີລັກສະນະປ້ອງກັນ.
- ❖ ພວກເຮົາບໍ່ສາມາດທີ່ຈະຮ້າຍ/ໂກດເຄືອງ ຫຼື ເສຍສະມາທິການຄວບຄຸມ, ແຕ່ຕ້ອງເປັນແບບຢ່າງໃນການປະພຶດທີ່ດີ ແລະ ປະຕິບັດຕາມກົດລະບຽບເພື່ອນັກຮຽນຂອງພວກເຮົາ.
- ❖ ເມື່ອມີຄວາມຈຳເປັນຕ້ອງປະຕິບັດວິໄນ, ໃຫ້ເນັ້ນໃສ່ສະເພາະ ແຕ່ຕົວພຶດຕິກຳຂອງນັກຮຽນ ບໍ່ແມ່ນຕົວນັກຮຽນ, ກຽດສັກສີຂອງນັກຮຽນຍັງຕ້ອງຮັກສາຢູ່.
- ❖ ພວກເຮົາຈຳເປັນຕ້ອງຊຸກຍູ້ສິ່ງເສີມ ໃຫ້ນັກຮຽນຕິດຕາມກຳກັບການປະພຶດຂອງເຂົາເຈົ້າເອງໂດຍເຮັດບັນທຶກປະຈຳວັນ ກ່ຽວກັບກິດຈະກຳທີ່ມີຮ່ວມກັບຜູ້ອື່ນໆ. ນັກຮຽນຍັງມີຄວາມຈຳເປັນຕ້ອງຕິດຕາມການປະພຶດຂອງກັນ ແລະ ກັນດ້ວຍຄວາມເຄົາລົບນັບຖື.
- ❖ ໃນການສິດສອນ, ພວກເຮົາບໍ່ຄວນໃຊ້ຄຳສັບທີ່ຄຸມເຄືອ ຫຼື ແບບກ້ວາງໆ. ກິດຈະກຳຕ່າງໆຄວນມີຂັ້ນຕອນຕໍ່ເນື່ອງທີ່ຈະແຈ້ງ ແລະ ມີການແຊກແຊງເລັກນ້ອຍເທົ່າທີ່ຈະເຮັດໄດ້.

ຄຸນລັກສະນະຈຳນວນໜຶ່ງທີ່ນັກຮຽນມີຄວາມພໍໃຈໃນຕົວຄູສອນ ແລະ ຄວນປະກອບສ້າງໃຫ້ເປັນ ພາກສ່ວນ ທີ່ສຳຄັນຂອງການຕິດຕາມການປະພຶດຂອງພວກເຮົາເອງມີດັ່ງນີ້:

ຄວາມເປັນທຳ: ນັກຮຽນເຫັນສິ່ງນີ້ເປັນຄຸນລັກສະນະສຳຄັນທີ່ສຸດຂອງຄູສອນ. ໝາຍຄວາມວ່າ ຕ້ອງມີຄວາມຍຸດຕິທຳໃນກິດຈະກຳຕ່າງໆ ເຊັ່ນ ການມອບວຽກງານໃຫ້, ການລະງັບການຜິດຖຽງກັນ, ການໃຫ້ການຊ່ວຍເຫຼືອ ແລະ ການຄັດເລືອກນັກຮຽນເພື່ອໃຫ້ເປັນຜູ້ຊ່ວຍ ຫຼື ເຂົ້າຮ່ວມກິດຈະກຳພິເສດ.

ອາລົມຂັນ. ມີຄວາມສາມາດຕອບສະໜອງ ຄວາມຜ່ອນຄາຍໃຫ້ແກ່ນັກຮຽນ.

ຄວາມເຄົາລົບນັບຖື. ອັນນີ້ມີຄວາມໝາຍວ່າ ສະແດງໃຫ້ເຫັນຄວາມເອົາໃຈໃສ່ຕໍ່ສິດທິ ແລະ ຄວາມຮູ້ສຶກຂອງນັກຮຽນ.

ຄວາມສຸພາບ: ອັນນີ້ແມ່ນເຄື່ອງໝາຍອັນໜຶ່ງຂອງຄວາມເຄົາລົບນັບຖື.

ເປັນຄົນເປີດເຜີຍ/ຈິງໃຈ. ນັກຮຽນມີຄວາມຕ້ອງການຢາກເຫັນຄູສອນເປັນຄົນມີນ້ຳໃສໃຈຈິງ. ຄູສອນຈຳເປັນຕ້ອງອະທິບາຍຢ່າງຈະແຈ້ງເຖິງຄວາມຮູ້ສຶກຂອງຕົນ ແລະສະພາບການທີ່ເປັນຕົ້ນເຫດຂອງຄວາມຮູ້ສຶກນັ້ນ.

ຮັບຟັງຢ່າງຕັ້ງໃຈ. ອັນນີ້ມີຄວາມໝາຍເຖິງການໃຫ້ການຕອບຮັບ ເມື່ອເວລານັກຮຽນເວົ້າອອກມາ. ທ່ານ ຈຳເປັນຕ້ອງສະແດງໃຫ້ເຫັນວ່າ ທ່ານ ໄດ້ຍິນນັກຮຽນເວົ້າ ແລະ ໃຫ້ໂອກາດແກ່ເຂົາເຈົ້າໄດ້ແກ້ໄຂຄວາມເຂົ້າໃຈຜິດ ຫຼື ການຕີຄວາມໝາຍຜິດ. ທ່ານອາດພະຍາຍາມເວົ້າຄືນໃໝ່ກ່ຽວກັບສິ່ງທີ່ໄດ້ເວົ້າໄປແລ້ວ ຫຼື ນຳໃຊ້ທ່າທາງ ເພື່ອສະແດງເຖິງຄວາມເມດຕາຄວາມເຫັນອົກເຫັນໃຈ.

ພວກເຮົາຈະສາມາດຍຶດຖືມາດຖານຂອງການປະພຶດຂອງພວກເຮົາໃຫ້ໄດ້ດີແນວໃດນັ້ນ ມັກຈະຂຶ້ນກັບຮູບແບບຂອງການຄຸ້ມຄອງຢູ່ໃນຫ້ອງຮຽນ.

ກິດຈະກຳເພື່ອປະຕິບັດ: ຮູບຮ່າງລັກສະນະຂອງການຄຸ້ມຄອງຫ້ອງຮຽນ.

ຮູບແບບການຄຸ້ມຄ້ອງຫ້ອງຮຽນຂອງທ່ານ ຈະເປັນຕົວກຳນົດວ່າ ທ່ານສາມາດປະຕິສຳພັນກັບນັກຮຽນຂອງທ່ານໄດ້ດີສ່ຳໃດ, ທ່ານສາມາດສ້າງສາຍພົວພັນອັນດີກັບເຂົາເຈົ້າໄດ້ດີສ່ຳໃດ ແລະ ເຂົາຈະຮຽນຮູ້ຈາກທ່ານໄດ້ດີສ່ຳໃດ. ມັນຍັງສາມາດມີຜົນກະທົບຕໍ່ວິທີປະພຶດທີ່ເໝາະສົມ ຫຼື ບໍ່ເໝາະສົມຂອງນັກຮຽນຂອງທ່ານ ແລະ ວິທີການຂອງການປະຕິບັດວິໄນນັກຮຽນຂອງທ່ານແນວໃດ, ທ່ານມັກໃຊ້ການປະຕິບັດວິໄນແນວທາງລົບຫລາຍກວ່າທາງບວກບໍ່ ເພື່ອທີ່ຈະຊ່ວຍເຫຼືອນັກຮຽນຂອງທ່ານ ຮຽນຮູ້ການປະພຶດທີ່ຖືກຕ້ອງເໝາະສົມ. ເພື່ອເລີ່ມຕົ້ນການກຳນົດຮູບແບບການຄຸ້ມຄອງຂອງທ່ານ, ໃຫ້ທ່ານອ່ານຂໍ້ຄວາມແຕ່ລະອັນຢູ່ໃນຕາຕະລາງລຸ່ມນີ້ຢ່າງລະອຽດຖີ່ຖ້ວນ. ແລ້ວໃຫ້ຕອບວ່າເຫັນດີ ຫຼື ບໍ່ເຫັນດີກັບຂໍ້ຄວາມນັ້ນ, ຈະຖືວ່າເປັນການດີ ຖ້າຫາກວ່າຂໍ້ຄວາມນັ້ນເປັນສິ່ງທີ່ທ່ານເຮັດໃນຕົວຈິງ.

	ຄຸນລັກສະນະ	**ເຫັນດີ**	**ບໍ່ເຫັນດີ**
1	ຂ້ອຍເຊື່ອວ່າ ຫ້ອງຮຽນຕ້ອງມິດງຽບສຳລັບນັກຮຽນ ເພື່ອຈະໄດ້ຮ່ຳຮຽນ.		
2	ຂ້ອຍເຊື່ອວ່າ ການນັ່ງຕາມຕັ່ງທີ່ຈັດໃຫ້ (ເຊັ່ນ ຈັດເປັນແຖວ) ຈະຫລຸດຜ່ອນການ ປະພຶດທີ່ບໍ່ເໝາະສົມ ແລະ ສົ່ງເສີມການຮ່ຳຮຽນ.		
3	ຂ້ອຍບໍ່ມັກການຖືກລົບກວນໃນເວລາຂ້ອຍກຳລັງສິດສອນ.		
4	ນັກຮຽນຄວນຮຽນຮູ້ເພື່ອເຮັດຕາມການແນະນຳ ແລະບໍ່ຄວນຖາມ		

	ຄຸນລັກສະນະ	ເຫັນດີ	ບໍ່ເຫັນດີ
	ເຫດຜົນວ່າ ເປັນຫຍັງ.		
5	ນັກຮຽນຂອງຂ້ອຍບໍ່ຄ່ອຍມີຂໍ້ຄິດລິເລີ່ມການເຮັດກິດຈະກຳຕ່າງໆ. ເຂົາ ຄວນສຸມໃສ່ສິ່ງທີ່ຂ້ອຍກຳລັງສອນເຂົາຢູ່.		
6	ເມື່ອເວລານັກຮຽນປະພຶດບໍ່ເໝາະສົມ, ຂ້ອຍລົງໂທດ ຫຼື ໃສ່ວິໄນເຂົາທັນ ທີທັນໃດ ໂດຍບໍ່ມີການໂຕ້ຖຽງອັນໃດອີກຕໍ່ໄປ.		
7	ຂ້ອຍບໍ່ຍອມຮັບຄຳຂໍໂທດສຳລັບການປະພຶດທີ່ບໍ່ເໝາະສົມ ເຊັ່ນ ເຮັດວຽກ ບ້ານຊ້າ ຫຼືບໍ່ເຮັດວຽກບ້ານ.		
8	ຂຶ້ນກັບສິ່ງທີ່ພວມຮຳຮຽນຢູ່, ຫ້ອງຮຽນຂອງຂ້ອຍອາດມີການຈັດສັນຫຼາຍ ຮູບແບບ.		
9	ຂ້ອຍມີຄວາມເປັນຫ່ວງກ່ຽວກັບສອງສິ່ງ ຄື ນັກຮຽນຂອງຂ້ອຍໄດ້ຮຽນຮູ້ ຫຍັງ ແລະ ເຂົາເຈົ້າຮຽນຮູ້ແນວໃດ.		
10	ນັກຮຽນຂອງຂ້ອຍຮູ້ວ່າ ເຂົາສາມາດແຊກແຊງຂັດຂວາງການບັນລະຍາຍ ຂອງຂ້ອຍໄດ້ ຖ້າຫາກວ່າເຂົາມີຄຳຖາມທີ່ສອດຄ່ອງ ເໝາະສົມ.		
11	ຂ້ອຍໃຫ້ຄຳຊົມເຊີຍເມື່ອຮັບປະກັນວ່າມັນມີເຫດຜົນ ແລະຂ້ອຍກໍຊຸກຍູ້ ສິ່ງເສີມ ນັກຮຽນໃຫ້ເຮັດດີຂຶ້ນກວ່າເກົ່າ.		
12	ຂ້ອຍເອົາງານໂຄງການໃຫ້ນັກຮຽນເຮັດເພື່ອເປັນການເຝິກຫັດຮຽນຮູ້ ຫຼື ບອກໃຫ້ເຂົາເຈົ້າສ້າງໂຄງການດ້ວຍເຂົາເຈົ້າເອງ. ຫຼັງຈາກນັ້ນ ພວກເຮົາ ສົນທະນາອະພິປາຍສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ແລະ ສິ່ງທີ່ເຂົາເຈົ້າຈຳເປັນ ຕ້ອງຍັງຕ້ອງຮຽນຕື່ມອີກ.		
13	ຂ້ອຍອະທິບາຍເລື້ອຍໆເຖິງເຫດຜົນຢູ່ເບື້ອງຫຼັງຂອງກົດລະບຽບ ແລະ ການຕັດສິນໃຈຂອງຂ້ອຍ.		
14	ເມື່ອເວລານັກຮຽນປະພຶດບໍ່ເໝາະສົມ, ຂ້ອຍວ່າກ່າວດ້ວຍຄວາມສຸພາບ ນິ້ມນວນ ແຕ່ແນ່ນອນໝັ້ນຄົງ. ຖ້າຈຳເປັນຕ້ອງປະຕິບັດວິໄນ, ຂ້ອຍກໍ ຈະພິຈາລະນາສະພາບການຢ່າງລະອຽດຖີ່ຖ້ວນ.		
15	ຂ້ອຍເຊື່ອວ່ານັກຮຽນ ຮຽນໄດ້ດີທີ່ສຸດ ເມື່ອເວລາ “ເຂົາເຈົ້າສາມາດເຮັດ ໂດຍຕົນເອງ“, ໝາຍຄວາມວ່າ ເຂົາເຮັດສິ່ງທີ່ເຂົາເຈົ້າ ຮູ້ສຶກວ່າສາມາດ ເຮັດໄດ້ດີ.		
16	ການມີອາລົມຈິດດີຂອງນັກຮຽນຂອງຂ້ອຍແມ່ນ ມີຄວາມສຳຄັນກ່ວາ ການຄວບຄຸມຫ້ອງ. ສິ່ງສຳຄັນ ຢູ່ທີ່ນັກຮຽນຂອງຂ້ອຍເຫັນຂ້ອຍ		

	ຄຸນລັກສະນະ	ເຫັນດີ	ບໍ່ເຫັນດີ
	ໃນຖານະເພື່ອນຂອງເຂົາ.		
17	ນັກຮຽນຂອງຂ້ອຍຈຳນວນໜຶ່ງມີຄວາມກະຕືລືລົ້ນຮ່ຳຮຽນ ໃນຂະນະອີກຈຳນວນໜຶ່ງບໍ່ມີຄວາມສົນໃຈ.		
18	ຂ້ອຍບໍ່ມີການວາງແຜນລ່ວງໜ້າວ່າ ຂ້ອຍຈະໃສ່ວິໄນນັກຮຽນອັນໃດ. ຂ້ອຍພຽງປ່ອຍໃຫ້ມັນເກີດຂຶ້ນ.		
19	ຂ້ອຍບໍ່ຕ້ອງການຕິດຕາມກວດກາຫຼື ວ່າກ່າວໃດໆນັກຮຽນ ຍ້ອນວ່າມັນອາດແຕະຕ້ອງຄວາມຮູ້ສຶກຂອງເຂົາເຈົ້າ.		
20	ຖ້າຫາກນັກຮຽນລົບກວນຫ້ອງຮຽນ, ຂ້ອຍຈະໃຫ້ຄວາມເອົາໃຈໃສ່ ພິເສດຕໍ່ເຂົາ ຍ້ອນວ່າເຂົາເຈົ້າຕ້ອງມີອັນໃດອັນໜຶ່ງທີ່ມີຄຸນຄ່າ ເພື່ອເພີ່ມເຕີມ.		
21	ຖ້າຫາກນັກຮຽນຂໍອອກຈາກຫ້ອງໄປ, ຂ້ອຍອະນຸຍາດໃຫ້ກຽດເຂົາໄປ.		
22	ຂ້ອຍບໍ່ຕ້ອງການໃຊ້ລະບຽບໃດໆບັງຄັບນັກຮຽນຂອງຂ້ອຍ.		
23	ຂ້ອຍນຳໃຊ້ແຜນບົດສອນ ແລະກິດຈະກຳຕ່າງໆທີ່ຂ້ອຍເຄີຍໃຊ້ປີຕໍ່ປີມາ, ດັ່ງນັ້ນ, ຂ້ອຍບໍ່ຕ້ອງກະກຽມການສິດສອນບົດຮຽນຂອງຂ້ອຍໄວ້ລ່ວງໜ້າ.		
24	ການລົງໄປພາກສະໜາມ ແລະມີໂຄງການພິເສດ ບໍ່ສາມາດເປັນໄປໄດ້, ຂ້ອຍບໍ່ມີເວລາເພື່ອກະກຽມວຽກດັ່ງກ່າວ.		
25	ຂ້ອຍອາດເອົາຮູບເງົາ ຫຼືຮູບເລື່ອນ (Slidershow) ມາສາຍໃຫ້ ນັກຮຽນເບິ່ງ ແທນທີ່ຈະເຮັດການບັນລະຍາຍ.		
26	ນັກຮຽນຂອງຂ້ອຍມີທ່າອຽງຈະເບິ່ງອ້ອມຮອບຫ້ອງຮຽນ ແລະ ຫຼຽວອອກນອກປ່ອງຢ້ຽມຫຼາຍໆເທື່ອ.		
27	ຖ້າຫາກສອນບົດຮຽນແລ້ວກ່ອນໂມງ, ນັກຮຽນຂອງຂ້ອຍສາມາດຮຽນແບບງຽບໆ ຫຼືລົມກັນຄ່ອຍໆໄດ້.		
28	ຂ້ອຍບໍ່ຄ່ອຍປະຕິບັດວິໄນນັກຮຽນຂອງຂ້ອຍ. ຖ້າຫາກນັກຮຽນສົ່ງວຽກບ້ານຊ້ຳ, ມັນບໍ່ແມ່ນບັນຫາຂອງຂ້ອຍ.		

ໃນຂັ້ນຕໍ່ໄປ, ໃຫ້ທ່ານເພີ່ມຈຳນວນ “ເຫັນດີ” ສຳລັບຄຳເຫັນແຕ່ຂໍ້ 1-7 , ຕໍ່ດ້ວຍຂໍ້ 8-14, 15-21 ແລະ ຂໍ້ 22-28. ສຳລັບຄຳເຫັນແຕ່ລະຊຸດ ທ່ານ ມີຈຳນວນຄຳຕອບຂອງຄຳວ່າ “ເຫັນດີ” ສູງສຸດບໍ? ອັນນີ້ແມ່ນຮູບແບບຂອງການບໍລິຫານຂອງທ່ານ ທີ່ທ່ານມັກ, ເຖິງວ່າທ່ານມີຄຸນລັກສະນະຂອງ ການບໍລິຫານແບບອື່ນອີກ ທ່ານກໍຢ່າໄດ້ປະຫຼາດໃຈ.

ຢູ່ໃນຕາຕະລາງ ຂ້າງເທິງນີ້, ຄຳເຫັນແຕ່ 1-7 ສ່ອງແສງໃຫ້ເຫັນການບໍລິຫານໃນຮູບແບບ ຜູ້ໃຊ້ອຳນາດ “ຂ້ອຍເປັນນາຍຄູ ແລະ ພວກເຮົາຈະເຮັດສິ່ງຕ່າງໆຕາມທາງຂອງຕົນ” ຮູບແບບນີ້ ແມ່ນດີສຳລັບເຮັດໃຫ້ຫ້ອງຮຽນມີການຈັດໂຄງສ້າງທີ່ດີ, ແຕ່ວ່າມັນເຮັດໄດ້ພຽງໜ້ອຍດຽວ ເພື່ອ ເພີ່ມການກະຕຸ້ນຄວາມສຳເລັດ ຫຼື ຊຸກຍູ້ການຕັ້ງເປົ້າໝາຍສ່ວນບຸຄົນ. ນັກຮຽນຢູ່ໃນຫ້ອງຮຽນນີ້ ຄ້າຍຄືວ່າມີຄວາມລັ່ງເລໃນການລິເລີ່ມກິດຈະກຳ ເນື່ອງຈາກວ່າເຂົາເຈົ້າມີຄວາມຮູ້ສຶກບໍ່ມີອຳ ນາດໃດໆທັງສິ້ນ. ເຂົາເຈົ້າຕ້ອງເຊື່ອຟັງຄູສອນດ້ວຍການເສຍຄວາມມີອິດສະຫລະສ່ວນຕົວຂອງ ເຂົາເຈົ້າ.

ຢູ່ໃນຄຳເຫັນແຕ່ຂໍ້ 8-14 ສ່ອງແສງໃຫ້ເຫັນຮູແບບໃຫ້ສິດອຳນາດ“ພວກເຮົາມາເຮັດວຽກ ຮ່ວມກັນ”. ເຖິງແມ່ນວ່າຂໍ້ຈຳກັດຈະວາງໃສ່ການປະພຶດຂອງນັກຮຽນກໍຕາມ, ແຕ່ລະບຽບການ ຕ່າງໆຈະໄດ້ຮັບການອະທິບາຍ ແລະ ນັກຮຽນກໍໄດ້ຮັບອະນຸຍາດໃຫ້ມີເອກະລາດຢູ່ພາຍໃນ ຂໍ້ຈຳກັດນັ້ນ. ຄູສອນທີ່ໃຫ້ສິດອຳນາດແກ່ນັກຮຽນນັ້ນ ໄດ້ຊຸກຍູ້ສົ່ງເສີມພຶດຕິກຳແບບເພິ່ງຕົນເອງ ແລະແບບມີຄວາມສາມາດດ້ານສັງຄົມ. ຍິ່ງໄປກວ່ານັ້ນ, ຄູສອນຍັງຊຸກຍູ້ນັກຮຽນໃຫ້ມີຄວາມ ກະຕືລືລົ້ນ ແລະ ໄດ້ຮັບຜົນສຳເລັດ ຫຼາຍກວ່າເກົ່າ. ສ່ວນຫຼາຍ ຄູສອນແບບນີ້ຈະແນະນຳນັກຮຽນ ໂດຍຜ່ານການເຮັດໂຄງການ ຫຼາຍກວ່າຈະນຳພາເຂົາເຈົ້າເຮັດ.

ຢູ່ໃນຄຳເຫັນແຕ່ຂໍ້ 15-21 ເຜີຍໃຫ້ເຫັນຮູບແບບປ່ອຍໃຫ້ເຮັດຕາມໃຈ, “ອັນໃດກໍໄດ້ ຕາມເຈົ້າເວົ້າ”. ຄູສອນໃນຮູບແບບປ່ອຍໃຫ້ນັກຮຽນເຮັດຕາມໃຈຈະວາງຂໍ້ຽກຮ້ອງ ຫຼື ການຄວບ ຄຸມນັກຮຽນໜ້ອຍ. ຄູສອນຮູບແບບນີ້ ຈະຍອມຮັບຄວາມກະຕຸ້ນ ແລະ ການກະທຳຂອງນັກຮຽນ ແລະ ມີການຕິດຕາມພຶດຕິກຳຂອງນັກຮຽນໜ້ອຍ. ຄູສອນແບບນີ້ອາດຈະພະຍາຍາມບໍ່ແຕະ ຕ້ອງຄວາມຮູ້ສຶກຂອງນັກຮຽນ ແລະ ຍາກທີ່ຈະເວົ້າຄຳວ່າ “ບໍ່” ກັບນັກຮຽນ ຫຼື ບັງຄັບດ້ວຍກົດລະ ບຽບ. ເຖິງວ່າຄູສອນຮູບແບບນີ້ອາດຈະໄດ້ຮັບຄວາມນິຍົມຊົມຊອບຈາກນັກຮຽນກໍຕາມ, ຮູບ ແບບຕາມໃຈເກີນໄປຂອງຄູນີ້ ຈະໄປກ່ຽວເນື່ອງກັນກັບການຂາດຄວາມສາມາດດ້ານສັງຄົມ ແລະ ການຄວບຄຸມຕົນເອງຂອງນັກຮຽນ. ມັນເປັນການຍາກສຳລັບນັກຮຽນທີ່ຈະຮຽນຮູ້ການປະພຶດທີ່ ສັງຄົມຍອມຮັບໄດ້ ເມື່ອຄູສອນປ່ອຍຕາມໃຈເກີນໄປ. ການກຳນົດຂໍ້ຽກຮ້ອງຈຳນວນໜ້ອຍເກີນ ໄປຕໍ່ນັກຮຽນນັ້ນຈະເຮັດໃຫ້ນັກຮຽນເຫຼົ່ານີ້ມີຄວາມກະຕືລືລົ້ນຕ່ຳເພື່ອບັນລຸຜົນສຳເລັດ.

ສຸດທ້າຍ ຄຳເຫັນແຕ່ຂໍ້ 22-28 ສະແດງໃຫ້ເຫັນຮູບແບບ***ບໍ່ສົນໃຈ***, “ເຮັດອັນໃດກໍໄດ້ ຕາມເຈົ້າ ຕ້ອງການ”. ຄູສອນໃນຮູບແບບບໍ່ສົນໃຈຈະບໍ່ມັກໄປຫຍຸ້ງຫຍັງຢູ່ໃນຫ້ອງຮຽນ. ຄູສອນປະເພດນີ້ ມີຄວາມຮຽກຮ້ອງໃນຕົວນັກຮຽນໜ້ອຍ ແລະ ບໍ່ສົນໃຈນັກຮຽນ. ຄູສອນແບບດັ່ງກ່າວມັກຈະຮູ້ ສຶກວ່າການກະກຽມບົດຮຽນ ເພື່ອສອນເປັນຄວາມພະຍາຍາມທີ່ບໍ່ມີຄຸນຄ່າ. ນອກນີ້ຍັງຂາດກົດ ລະບຽບຫ້ອງຮຽນອີກ. ຢູ່ໃນສະພາບແວດລ້ອມທີ່ບໍ່ເປັນເພື່ອນມິດ ແລະ ບໍ່ສົນບໍ່ກ່ຽວ ຄືແນວນີ້,

ນັກຮຽນຈະມີໂອກາດໜ້ອຍທີ່ສຸດເພື່ອສັງເກດ ຫຼື ປະຕິບັດທັກສະການສື່ສານ. ການກຳນົດຂໍ້ຮຽກຮ້ອງຈຳນວນໜ້ອຍ ແລະ ການມີລະບຽບວິໄນໜ້ອຍເກີນໄປນັ້ນ. ນັກຮຽນຈະມີການກະຕຸ້ນເພື່ອບັນລຸຜົນສຳເລັດຕ່ຳ ແລະ ຂາດການຄວບຄຸມຕົນເອງ.

ທ່ານສາມາດກວດສອບເບິ່ງຮູບແບບການຄຸ້ມຄອງຫ້ອງຮຽນຂອງທ່ານວ່າ ໃກ້ຄຽງກັບແບບໃດ ໄດ້ດ້ວຍການຖາມເພື່ອນຄູດ້ວຍກັນ, ຄູຜູ້ຊ່ວຍ ຫຼື ນັກຮຽນທີ່ໃຫຍ່ກວ່າໝູ່.

6. ການໃຫ້ການສະໜັບສະໜູນແບບທາງບວກ

ການປະຕິບັດວິໄນແບບສ້າງສັນ ເປັນວິທີທາງຫຼຸດຜ່ອນການປະພຶດທີ່ບໍ່ເໝາະສົມລົງ ດ້ວຍການຍ້ອງຍໍຊົມເຊີຍການປະພຶດທີ່ດີ. ມັນເປັນການອີງໃສ່ແນວຄິດທີ່ວ່າການປະພຶດທີ່ໄດ້ຮັບການຊົມເຊີຍນັ້ນ ເປັນການປະພຶດທີ່ຄວນເຮັດຄືນອີກ. ພາກສ່ວນທີ່ສຳຄັນກວ່າໝູ່ ຂອງການປະຕິບັດວິໄນແບບສ້າງສັນ ຈະກ່ຽວພັນກັບການຊ່ວຍນັກຮຽນຮຽນຮູ້ເອົາພຶດຕິກຳທີ່ຖືກຕ້ອງ ເພື່ອຕອບຮັບກັບຄວາມຄາດຫວັງຂອງ (ຜູ້ໃຫຍ່)ພວກເຮົາ, ເຊິ່ງຈະບັງເກີດຜົນໄດ້ຢູ່ໃນການສົ່ງເສີມການພົວພັນສັງຄົມໃນທາງບວກ, ແລະ ໃຫ້ຊ່ວຍນັກຮຽນພັດທະນາຈິດສຳນຶກຂອງການປະຕິບັດໄນດ້ວຍຕົນເອງ ເຊິ່ງຈະນຳໄປສູ່ການມີຄວາມພາກພູມໃຈໃນຕົນເອງໃນທາງບວກ. ບັນດາການປະພຶດ ຫຼື ພຶດຕິກຳທີ່ທ່ານເຫັນວ່າມີຄຸນຄ່າ ແລະ ຕ້ອງການຊຸກຍູ້ສົ່ງເສີມນັ້ນ ຈຳເປັນຕ້ອງໃຫ້ນັກຮຽນໄດ້ຮູ້ຈັກ ແລະ ທ່ານຈຳເປັນຕ້ອງສ້າງຄວາມພະຍາຍາມແບບຮ່ວມມືກັນ ເພື່ອສິດສອນ ແລະ ເສີມຂະຫຍາຍທ່າແຮງຂອງການປະພຶດເຫຼົ່ານີ້. ຍຸດທະສາດຈຳນວນໜຶ່ງ ທີ່ທ່ານສາມາດນຳໃຊ້ເພື່ອຊ່ວຍເຫຼືອນັກຮຽນໃຫ້ຮຽນຮູ້ການປະພຶດທີ່ດີລວມມີດັ່ງຕໍ່ໄປນີ້:

ໃຫ້ຂໍ້ຄິດເຫັນ ຫຼື ເວົ້າປະໂຫຍກທີ່ເປັນທາງບວກ “ເບິ່ງດູຄຳຕອບຂອງເຈົ້າຖືກຕັ້ງໜາຍຂໍ້ຕໍ່ນີ້. ເທື່ອໜ້າລອງຕອບໃຫ້ຖືກໜາຍກວ່ານີ້ອີກຍິ່ງດີ”.

ໃຫ້ຟັງຢ່າງລະອຽດຖີ່ຖ້ວນແລະໃຫ້ຊ່ວຍນັກຮຽນໃຫ້ຮຽນໃຊ້ຄຳສັບທີ່ສະແດງໃຫ້ເຫັນເຖິງຄວາມຮູ້ສຶກຂອງເຂົາ, ບໍ່ແມ່ນການກະທຳແບບທຳລາຍ.

ໃຫ້ນັກຮຽນຂອງທ່ານມີໂອກາດເລືອກ ແລະຊ່ວຍເຫຼືອເຂົາເຈົ້າຮຽນຮູ້ ເພື່ອປະເມີນຜົນຜົນໄດ້ຮັບທີ່ສຳຄັນຂອງການເລືອກປະຕິບັດຂອງເຂົາເຈົ້າ.

ໃຫ້ເສີມຂະຫຍາຍການປະພຶດທີ່ເພິ່ງປາຖະໜາເມື່ອມັນປະກົດອອກມາ ດ້ວຍການຍ້ອງຍໍຊົມເຊີຍເລື້ອຍໆ ແລະ ຢ່າໃສ່ໃຈຄວາມຜິດເລັກໆນ້ອຍໆ.

ເປັນແບບຢ່າງ ທີ່ມີກຽມການຢ່າງດີ, ພຶດຕິກຳທີ່ສາມາດຄາດຄະເນລ່ວງໜ້າໄດ້, ການສື່ສານຕິດຕໍ່ພົວ ພັນດ້ວຍຄວາມນັບຖືກັນ ແລະ ຍຸດທະສາດການແກ້ໄຂຂໍ້ຂັດແຍ່ງທີ່ມີການຮ່ວມມືກັນ.

ນຳໃຊ້ພາສາກາຍຢ່າງເໝາະສົມ ງຶກຫົວ, ຍິ້ມ ແລະ ເບິ່ງຕົງໄປຫານັກຮຽນ.

ໃຫ້ທ່ານໂຍ້ຕົ໋ລົງ ໃຫ້ຕ່ຳ ໂດຍສະເພາະກັບນັກຮຽນທີ່ຍັງນ້ອຍ ເຊັ່ນ ກົ້ມລົງ, ນັ່ງຄຸເຂົ່າ ຫຼື ນັ່ງລະດັບດຽວກັບນັກຮຽນ

ຈັດສະພາບແວດລ້ອມຄືນໃໝ່.ໃຫ້ຍ້າຍວັດຖຸສິ່ງຂອງທີ່ພາໃຫ້ເກີດມີການປະພຶດທີ່ບໍ່ເໝາະສົມອອກໄປ; ຕົວຢ່າງ, ຖ້າຫາກມີເຄື່ອງຫຼິ້ນເກມ ຫຼື ເຄື່ອງຫຼິ້ນທີ່ໃຊ້ສຳລັບເປັນອຸປະກອນການສິດສອນ, ເມື່ການນຳໃຊ້ ສຳເລັດແລ້ວກໍໃຫ້ຍ້າຍອອກໄປ.

ແນະນຳໃຫ້ປະພຶດໃນທາງບວກຄືນອີກເມື່ອນັກຮຽນຄົນໜຶ່ງຕົບບານຢູ່ໃນຫ້ອງຮຽນ. ໃຫ້ບອກນັກຮຽນວ່າ “ນ້ອງສາມາດຕົບບານຢູ່ນອກຫ້ອງຢູ່ໃນເດີ່ນຫຼິ້ນບ່ອນທີ່ມພື້ນທີ່ວ່າງກວ້າງກວ່າ.

ເມື່ອສະຫຼຸບແລ້ວ, ຈາກຫົວຂໍ້ນີ້ ພວກເຮົາໄດ້ຮຽນຮູ້ວ່າ ຫ້ອງຮຽນທີ່ມີການຄຸ້ມຄອງທີ່ມີປະສິດທິຜົນ ແມ່ນຫ້ອງຮຽນທີ່ສ້າງ ແລະ ສະໜັບສະໜູນພຶດຕິກຳທີ່ເປັນທາງບວກເຊິ່ງໃນນັ້ນມີ:

1. ທ່ານຮູ້ສິ່ງທີ່ທ່ານຕ້ອງການ ແລະສິ່ງທີ່ທ່ານບໍ່ຕ້ອງການ.
2. ທ່ານສະແດງໃຫ້ເຫັນ ແລະບອກນັກຮຽນໃຫ້ຮູ້ເຫັນສິ່ງທີ່ທ່ານຕ້ອງການ.
3. ເມື່ອເວລາທ່ານໄດ້ຮັບສິ່ງທີ່ທ່ານຕ້ອງການ,ໃຫ້ສະແດງຄວາມຮັບຮູ້ບຸນຄຸນສິ່ງດັ່ງກ່າວນັ້ນ.
4. ເມື່ອທ່ານໄດ້ຮັບສິ່ງອື່ນ(ທີ່ບໍ່ຕ້ອງການ) ໃຫ້ມີປະຕິກິລິຍາໂຕ້ຕອບຢ່າງໄວວາ, ຢ່າງເໝາະສົມ ແລະ ໃຫ້ມີລັກສະນະໃນທາງບວກ.

ເຖິງຢ່າງໃດກໍດີ, ຢູ່ໃນຂະບວນການນີ້ທ່ານມີຄວາມຈຳເປັນຕ້ອງມີຄວາມແນ່ໃຈວ່າ:

1. ຄວາມຄາດຫວັງຂອງທ່ານຕ້ອງໃຫ້ຈະແຈ້ງ
2. ຂໍ້ແນະນຳຂອງທ່ານ ຕ້ອງໃຫ້ນັກຮຽນມີຄວາມສົນໃຈ.
3. ນັກຮຽນຂອງທ່ານເຫັນຈຸດມຸ່ງໝາຍ ແລະເຫັນຄຸນຄ່າສິ່ງທີ່ທ່ານກຳລັງສອນ.
4. ຂໍ້ແນະນຳນັ້ນຕ້ອງກ່ຽວໂຍງແນວຄວາມຄິດ ແລະ ທັກສະຕໍ່ກັບປະສົບການຂອງນັກຮຽນ ແລະ ມີຄວາມໝາຍສຳຄັນກັບຊີວິດປະຈຳວັນຂອງເຂົາເຈົ້າ.
5. ຍຸດທະສາດຂອງການສິດສອນຕ້ອງມີຄວາມຫຼາກຫຼາຍ. ເຖິງແມ່ນວ່າຫົວຂໍ້ຂອງບົດຮຽນຈະເປັນໜ້າສົນໃຈກໍຕາມ, ນັກຮຽນສາມາດເກີດຄວາມເບື່ອໜ່າຍໄດ້ ຖ້າຫາກທ່ານນຳໃຊ້ວິທີການສິດສອນແບບເກົ່າໄປຕະຫລອດ.

ບາງແນວທາງທີ່ສຳຄັນເຊິ່ງທ່ານສາມາດເລີ່ມຕົ້ນສ້າງສະພາບແວດລ້ອມ ທີ່ນຳໄປສູ່ການພັດທະນາການປະພຶດໃນທາງບວກໃນນັກຮຽນຂອງທ່ານລວມມີດັ່ງຕໍ່ໄປນີ້:

1. ໃຫ້ຍຶດຖື ແລະ ສື່ສານຄວາມຄາດຫວັງທາງດ້ານການປະພຶດ ທີ່ສູງໄວ້ສຳລັບຂອງນັກຮຽນ ແລະ ຕົວທ່ານເອງ.
2. ໃຫ້ສ້າງກົດລະບຽບ ແລະ ຂະບວນການດຳເນີນທີ່ຈະແຈ້ງແລະໃຫ້ຄຳແນະນຳແກ່ນັກຮຽນ ວິທີທີ່ຈະປະຕິບັດຕາມແມ່ນແນວໃດ,ໃຫ້ຄຳແນະນຳ,ການປະຕິບັດຈິງ ແລະ ເຕືອນເພື່ອທົບ ທວນ ຄວາມຈຳ ສຳລັບນັກຮຽນລະດັບປະຖົມເປັນພິເສດ .
3. ໃຫ້ນັກຮຽນເຂົ້າໃຈແຈ້ງຕໍ່ຜົນທີ່ໄດ້ຮັບຈາກການປະພຶດທີ່ຖືກຕ້ອງ ແລະ ການປະພຶດແນວບໍ່ດີ.
4. ບັງຄັບໃຊ້ກົດລະບຽບຂອງຫ້ອງຮຽນໂດຍທັນທີ,ຢ່າງສະໝ່ຳສະເໝີ ແລະ ມີຄວາມຊອບທຳ ນັບແຕ່ມື້ທຳອິດຂອງມື້ເປີດໂຮງຮຽນເປັນຕົ້ນໄປ.
5. ໃຫ້ເຮັດວຽກເພື່ອປູກຈິດສຳນຶກຂອງການມີວິໄນໃນຕົວເອງເຂົ້າໄປໃນຈິດໃຈຂອງນັກຮຽນ; ອຸທິດ ເວລາເພື່ອສິດສອນທັກສະຂອງການຕິດຕາມກວດກາຕົນເອງ.
6. ໃຫ້ຮັກສາຈັງຫວະການແນະນຳແບບຄ່ອງແຄ້ວ ແລະ ເຮັດການປ່ຽນຜ່ານຢ່າງນຸ້ມນວນ ລະຫວ່າງກິດຈະກຳຕ່າງໆ.
7. ຕິດຕາມຊ່ວຍເຫຼືອ ກຳກັບກິດຈະກຳຂອງຫ້ອງຮຽນ ແລະ ໃຫ້ການສ່ອງແສງຄືນແກ່ນັກຮຽນ ແລະ ໃຫ້ການສະ ໜັບສະໜູນ ເລື່ອງກ່ຽວກັບການປະພຶດຂອງເຂົາເຈົ້າ.
8. ສ້າງໂອກາດສຳລັບນັກຮຽນ ເພື່ອໃຫ້ເຂົາປະສົບກັບຜົນສຳເລັດໃນການຮຽນຮູ້ ແລະ ພຶດຕິກຳທາງດ້ານສັງຄົມ.
9. ໃຫ້ກຳນົດນັກຮຽນ ຜູ້ທີ່ເຫັນວ່າມີຄວາມພາກພູມໃນໃຈຕົນເອງຕ່ຳ ແລະ ໃຫ້ຊ່ວຍເຫຼືອ ເຂົາ ເຈົ້າ ໃຫ້ໄດ້ບັນລຸຜົນສຳເລັດດີກ່ວາເກົ່າ ແລະ ມີຄວາມເຊື່ອໝັ້ນຫຼາຍຂຶ້ນ.
10. ໃຫ້ນຳໃຊ້ການຮ່ຳຮຽນເປັນກຸ່ມຮ່ວມມືກັນ, ເທົ່າທີ່ມີຄວາມເໝາະສົມ.
11. ໃຫ້ນຳໃຊ້ອາລົມຂັນ ເມື່ອມີຄວາມເໝາະສົມ, ເພື່ອກະຕຸ້ນຄວາມສົນໃຈຂອງນັກຮຽນ ຫຼື ຫລຸດຜ່ອນຄວາມຕຶງຄຽດຢູ່ໃນຫ້ອງຮຽນ.
12. ໃຫ້ເອົາອຸປະກອນທີ່ຂວາງຫູຂວາງຕາອອກ ເມື່ອເວລາການສິດສອນພວມດຳເນີນໄປ.
13. ເຮັດໃຫ້ຫ້ອງຮຽນມີຄວາມສະດວກສະບາຍໃຈ, ມີຄວາມດຶງດູດໃຈ ແລະ ຍິນດີຕ້ອນຮັບ ນັກຮຽນ, ພໍ່ແມ່ຜູ້ປົກຄອງ ແລະ ຕົວທ່ານເອງ.

ບົດທີ 4

ການກຽມພ້ອມແກ້ບັນຫາຄວາມແຕກຕ່າງຫລາກຫລາຍຂອງເດັກໃນຫ້ອງຮຽນ

4.1 ການໃຫ້ຄ່ານິຍົມ ແລະ ການຊຸກຍູ້ສິ່ງເສີມດ້ວຍຫລາຍວິທີ

ນັກຮຽນໃນຫ້ອງຮຽນຈະມີຄວາມແຕກຕ່າງຫລາກຫລາຍ ເພາະວ່າເດັກທຸກຄົນມີເອກະລັກສະເພາະຕົວ. ເດັກທັງຫລາຍຕ່າງມີປະສົບການ, ທັກສະ, ຄວາມຮູ້ ແລະ ທັດສະນະຄະຕິທີ່ແຕກຕ່າງຫລາກຫລາຍ. ເດັກທັງຫມົດສາມາດປະກອບສ່ວນ ແລະ ນຳເອົາເຄື່ອງປຸງບາງຢ່າງ(ເຄື່ອງປະສົມຕ່າງໆ) ລົງໃສໝໍ້ແກງແຫ່ງການຮຽນຮູ້".ຄູເປັນຜູ້ທຳໜ້າທີ່ໃຫ້ຄວາມສະດວກສະໜອງສະພາບແວດລ້ອມແລະໂອກາດທີ່ເຫມາສົມຖືກຕ້ອງເພື່ອໃຫ້ເດັກທຸກຄົນຮຽນຮູ້ຢ່າງຕັ້ງໜ້າ.

ກິດຈະກຳເພື່ອປະຕິບັດ: ການໃຫ້ລາງວັນ- ການຮູ້ຈັກກັນ.

ຄູທີ່ຢູ່ໃນບັນດາກຸ່ມໂຮງຮຽນສາມາດໃຊ້ກິດຈະກຳນີ້ ເມື່ອພວກເຂົາພົບກັນເປັນຄັ້ງທຳອິດ. ຄູຍັງສາມາດໃຊ້ມັນ ເມື່ອພົບກັບນັກຮຽນໃນຕອນເລີ້ມຕົ້ນປີຮຽນ ຈົນກະທັ່ງການພົບປະກັບສະມາຄົມພໍ່ແມ່ນັກຮຽນຄັ້ງທຳອິດ.

ສຳລັບກິດຈະກຳນີ້, ຜູ້ເຂົ້າຮ່ວມເຮັດວຽກເປັນຄູ່. ພວກເຂົາຄວນຖາມຄຳຖາມກັນດ້ວຍຄຳຖາມປາຍເປີດເພື່ອຈະຊາບວ່າ ແຕ່ລະຄົນມີຄວາມພິເສດອັນໃດ ທີ່ຈະເປັນຜົນປະໂຫຍດແກ່ກຸ່ມ.

ປະໂຫຍກ ຂໍ້ຄວາມສຸດທ້າຍຄວນຂຽນໃສ່ "ບັດຄຳພອນສະຫວັນ" ຕົວຢ່າງ :

"ເພື່ອນຂອງຂ້ອຍ ຊື່.....ແລະ ລາວນຳເອົາພອນສະຫວັນດ້ານຄວາມອົດທົນມາ"

"ເພື່ອນຂອງຂ້ອຍ ຊື່.....ແລະ ລາວນຳເອົາພອນສະຫວັນດ້ານການຕະຫລົກມາ"

ຈາກນັ້ນ ຜູ້ເຂົ້າຮ່ວມແຕ່ລະຄູ່ ປ່ຽນກັນນຳສະເໜີທັກສະຂອງຕົນທີ່ມີຕໍ່ທັງໝົດກຸ່ມ. ພວກເຂົາຄວນເວົ້າກ່ຽວກັບທັກສະຕ່າງໆ ວ່າຈະສາມາດໃຫ້ປະໂຫຍດແກ່ທຸກຄົນຄືແນວໃດ ? ຄູຫລື (ຜູ້ອຳນວຍຄວາມສະດວກ) ກໍຄວນມີກ່ອງທີ່ຕົບແຕ່ງໄວ້ ເພື່ອຈະໃສ່ບັດຄຳພອນສະຫວັນຫລັງຈາກທີ່ແຕ່ລະຄົນໄດ້ນຳສະເໜີໃຫ້ກຸ່ມທັງຫມົດຟັງແລ້ວ.

ກິດຈະກຳນີ້ສາມາດບອກເຖິງຄວາມຈຳເປັນສຳລັບຄູເພື່ອຕີລາຄາ(ໃຫ້ຄຸນຄ່າ) ເດັກທຸກຄົນໃນຫ້ອງຮຽນຂອງເຂົາເຈົ້າ ແລະ ຄຸນນະພາບຂອງແຕ່ລະຄົນ ອາດຈະບໍ່ສາມາດເຫັນໄດ້ຊັດເຈນ

ສຳລັບຜູ້ສັງເກດທຳມະດາ. ໜ້າທີ່ຮັບຜິດຊອບຂອງພວກເຮົາ ກໍຄືຄົ້ນຫາໃຫ້ພົບຄຸນນະພາບຈຸດພິເສດທີ່ເດັກແຕ່ລະຄົນມີ.

ຈາກນັ້ນພວກເຮົາຈະສາມາດຈັດຕັ້ງປະສົບການຮຽນຮູ້ ທີ່ນຳໄປສູ່ການພັດທະນາ ແລະ ນຳໃຊ້ຄຸນນະພາບເຫລົ່ານີ້ໃນຂັ້ນຕໍ່ໄປ.

ກິດຈະກຳເພື່ອປະຕິບັດ:ເຈ້ຍເຫລືອໆ ມາຮູ້ຈັກກັນ ແລະ ຮຽນຮູ້ດ້ວຍກັນ.

ໃນກິດຈະກຳນີ້, ຜູ້ເຂົ້າຮ່ວມຈະຖືກຈັດໃຫ້ເປັນຄູ່ ແລະ ຂໍໃຫ້ຄິດກ່ຽວກັບພອນສະຫວັນ, ຄວາມສົນໃຈ ຫລື ງານອະດິເລກຂອງຕົນ. ຈາກນັ້ນ, ໃຫ້ບັນຍາຍສູ່ຄູ່ສົນທະນາຂອງຕົນໄດ້ຮູ້ບາງຢ່າງທີ່ຕົນມີຄວາມສົນໃຈ ແລະ ສອນຄູ່ຂອງຕົນບາງສິ່ງບາງຢ່າງທີ່ເຂົາບໍ່ຮູ້. ຖ້າເປັນໄປໄດ້ ແຕ່ລະຜູ້ເຂົ້າຮ່ວມຄວນມີກະດາດເຫລືອງໜຶ່ງແຜ່ນເພື່ອຂຽນໃສ່. ເຂົາຄວນຟັງຄູ່ຂອງຕົນກ່ອນ ແລະ ຂຽນພອນສະຫວັນ ຫລື ທັກສະ/ຄວາມສາມາດໃສ່ດ້ານເທິງຂອງເຈ້ຍສີເຫລືອງແລ້ວຕາມດ້ວຍການຂຽນຊື່ຂອງຄູ່ສົນທະນາ ແລະ ບາງຢ່າງທີ່ເຂົາໄດ້ຮູ້ກ່ຽວກັບທັກສະຈາກຄູ່ຕົນ. ຕົວຢ່າງ:

ທັກສະ: ການຫາປາ

ຄຳກອນ ໃສສະອາດ

ຂ້ອຍໄດ້ຮຽນຮູ້ວ່າ.....

ຍາມລາຕີຫາປາໄດ້ດີ

ຖ້ານຳ້ສະຫງົບຍິ່ງເປັນການດີ

ເຝົ້າລໍຖ້າໃຫ້ດວງຈັນຕື່ນຂຶ້ນມາ

ໃຊ້ເຫຍື່ອຕ່າງກັນສຳລັບປາຕ່າງຊະນິດ

ຫລັງຈາກທີ່ຄູ່ສົນທະນາເວົ້າກ່ຽວກັບສິ່ງທີ່ເຂົາເຈົ້າມີຄວາມສົນໃຈແລ້ວ, ຂຶ້ນຢູ່ກັບເວລາທີ່ມີ, ຜູ້ໃຫ້ຄວາມສະດວກສາມາດຖາມຫາອາສາສະໝັກ ທີ່ຈະຂຶ້ນມາທາງໜ້າຫ້ອງ. ຈາກນັ້ນໃຫ້ຜູ້ເຂົ້າຮ່ວມຜູ້ອື່ນ ຖາມໄດ້ບໍ່ເກີນ 5 ຄຳຖາມ ເພື່ອທີ່ຈະພະຍາຍາມຄົ້ນຫາພອນສະຫວັນຂອງຄູ່ສົນທະນາລາວ. ໂດຍວິທີສັບປ່ຽນກັນໃຫ້ອາສາສະໝັກສະແດງອອກພອນສະຫວັນຂອງຄູ່ສົນທະນາ ແລະ ໃຫ້ຜູ້ອື່ນເດົາວ່າແມ່ນຫຍັງ ?

ຈາກນັ້ນ, ໃຫ້ເອົາເຈ້ຍສີເຫລືອງຂອງແຕ່ລະກຸ່ມຕິດໃສ່ກະດານ ເຊັ່ນ ກຸ່ມທັກສະໃນການເຮັດສວນຄົວ, ກຸ່ມທັກສະໃນດ້ານສິລະປະ ຫລື ກຸ່ມທັກສະໃນດ້ານກິລາ ແລະ ອື່ນໆ.

ພວກເຮົາສາ ມາດຮຽນຮູ້ຫຍັງແດ່ຈາກກິດຈະກຳເຫລົ່ານີ້?

- ພວກເຮົາໄດ້ຮຽນຮູ້ການທີ່ຕ້ອງຟັງເຊິ່ງກັນແລະກັນ;
- ພວກເຮົາໄດ້ຮູ້ກັນດີຂຶ້ນ;
- ພວກເຮົາໄດ້ຮຽນຮູ້ການສື່ສານແບບໃຊ້ຄຳເວົ້າ ແລະ ບ່ໃຊ້ຄຳເວົ້າໄດ້ດີຂຶ້ນ;
- ພວກເຮົາເປັນທີມງານທີ່ດີທີມໜຶ່ງທີ່ມີພອນສະຫວັນຫລາຍຢ່າງ;
- ພວກເຮົາໄດ້ຮຽນຮູ້ທີ່ຈະຖາມຄຳຖາມເປີດ
- ພວກເຮົາໄດ້ຮຽນຮູ້ຈາກກັນແລະກັນ

ຜູ້ໃຫ້ຄວາມສະດວກສາມາດກ່າວໄດ້ວ່າ ໜຶ່ງໃນບົດຮຽນທີ່ສຳຄັນທີ່ສຸດແມ່ນ **ພວກເຮົາ ສາ ມາດ ເຫັນວ່າແຕ່ລະຄົນມີພອນສະຫວັນ ແລະ ພອນສະຫວັນເຫລົ່ານີ້ສາມາດນຳໃຊ້ເຂົ້າໃນ ວຽກ ງານ ຂອງພວກເຮົາໃນຖານະທີ່ເປັນຄູ ກໍຄືເປັນຜູ້ຮຽນ.**

ຄູຕ້ອງຄຳນຶງວ່າ ເດັກແຕ່ລະຄົນນຳເອົາສິ່ງທີ່ດີໆໃດໜຶ່ງມາກັບເຂົາ ເຊິ່ງສາມາດປະກອບສ່ວນໄດ້. ເຖິງຢ່າງໃດກໍຕາມ, ຄູຕ້ອງຄົ້ນພົບໃຫ້ເຫັນສິ່ງດັ່ງກ່າວ. ເດັກສາມາດເປັນຄູຂອງກັນ ແລະ ກັນ ແລະ ສາມາດຮຽນຮູ້ດ້ວຍກັນ.

4.2 ການຮວບຮວມເອົາວິທີຄົ້ນຄິດ, ວິທີຮຽນຮູ້ແບບແຕກຕ່າງກັນເຂົ້ານຳໃຊ້ໃນຫ້ອງຮຽນ

ຢູ່ໃນເຄື່ອງມືທີ່ຜ່ານມາພວກເຮົາໄດ້ຮຽນຮູ້ວ່າ **ເດັກຮຽນຮູ້ດ້ວຍຫລາຍວິທີແຕກຕ່າງກັນ ແລະ ຢູ່ໃນຫລາຍລະດັບແຕກຕ່າງກັນ;** ນັ້ນກໍຄື ມັນມີຄວາມແຕກຕ່າງຫລາກຫລາຍໃນການຮຽນຮູ້. ດັ່ງນັ້ນ, ພວກເຮົາທີ່ເປັນຄູຈຳເປັນຕ້ອງປະດິດສ້າງເສັ້ນທາງແຫ່ງການຮຽນຮູ້ແບບຕ່າງໆ ໂດຍໃຊ້ວິທີສິດສອນທີ່ແຕກຕ່າງກັນ ເພື່ອເຮັດໃຫ້ເດັກທຸກຄົນສາມາດເຂົ້າໃຈຂໍ້ມູນຄວາມຮູ້ ທີ່ພວກເຮົາຈະສອນ ແລະ ສາມາດຮຽນຮູ້ໃນແນວທາງທີ່ມີຄວາມຫມາຍ ໂດຍສະເພາະເດັກທີ່ມີພື້ນເພ(ພູມຫຼັງ) ແລະ ຄວາມສາມາດແຕກຕ່າງກັນ.

ເສັ້ນທາງຂອງກິດຈະກຳການຮຽນການສອນຕ່າງໆ ຈະເລີ້ມຕັ້ງແຕ່ການທ່ອງຈຳ ແລະ ການຫລຳຄົນຈົນກະທັ່ງການແກ້ໂຈດບັນຫາ ແລະ ການຄົ້ນຄິດຢ່າງປະດິດສ້າງ.

ການທ່ອງຈຳ ການວິເຄາະ ການສັງເຄາະ ການແກ້ໂຈດບັນຫາ

ຢູ່ໃນຫ້ອງຮຽນຂອງເຮົາ,ພວກເຮົາສາມາດຊອກຫາວິທີຕ່າງໆເພື່ອໃຊ້ເສັ້ນທາງນີ້ທັງຫມົດ. ຕົວຢ່າງ: ເຮົາສາມາດ:

- **ໃຊ້ແທ່ງຕົວຕໍ່, ຕົວແບບ ແລະ ວັດຖຸສິ່ງຂອງເພື່ອສອນຄະນິດສາດ,** ເຊິ່ງຈະເຈາະເຂົ້າເຖິງທັກສະການເຄື່ອນໄຫວທີ່ດີຂອງເດັກ ແລະ ຄວາມເຂົ້າໃຈແບບປະຈັກຕາຂອງເຂົາ;
- **ຂໍໃຫ້ເດັກນັກຮຽນເວົ້າກ່ຽວກັບ (ຫລື ຂຽນກ່ຽວກັບ) ແນວຄວາມຄິດ ແລະ ຂະບວນການໃນຄະນິດສາດ,** ເຊິ່ງມັນຈະເຊື່ອມສຳພັນກັບການນຶກຄິດແບບໃຊ້ຖ້ອຍຄຳພາສາ ເພື່ອເຂົ້າໃຈແນວຄວາມຄິດລວມຍອດຂອງຄະນິດສາດ;

- **ບອກໃຫ້ເດັກນັກຮຽນແຕ້ມຮູບ ກ່ຽວກັບເລື່ອງລາວ/ນິດເລື່ອງທີ່ພວກເຮົາອ່ານໃຫ້ເຂົາຟັງ,** ເຊິ່ງພົວພັນກັບການນຶກຄິດອອກມາເປັນພາບ ໃນຄວາມຄິດຕາມຄຳເວົ້າ ແລະ ເຫດການໃນ ນິດເລື່ອງ ແລະ **ແນະນຳນຳພາເດັກນັກຮຽນໃນການສ້າງແຜນທີ່ບໍລິເວນໂຮງຮຽນ,** ເຊິ່ງຈະເຊື່ອມສຳພັນປະສົບການການເຄື່ອນໄຫວກາງຫາວກັບແນວຄວາມຄິດລວມຍອດທີ່ປະຈັກຕາ ແລະ ຄະນິດສາດ. ເມື່ອເດັກສຳຫລວດຊຸມຊົນທີ່ເຂົາອາໄສຢູ່, ເຂົາຈະຊອກເຫັນບັນຫາທີ່ມີໃນນັ້ນ ແລະ ໃຊ້ທັກສະຕ່າງໆ ໂດຍມີການຮ່ວມມືກັນເພື່ອສະເໜີແນະວິທີແກ້ໄຂບັນຫາດັ່ງກ່າວ. ນີ້ຄືພວກເຂົາກຳລັງຮຽນຮູ້ວິທີນຳໃຊ້ສິ່ງທີ່ເຂົາໄດ້ຮຽນຮູ້ໃນໂຮງຮຽນ. ພາກສ່ວນໜຶ່ງຂອງການໃຫ້ການສຶກສາທີ່ດີ ແມ່ນຂະບວນການນີ້ຍັງຊ່ວຍຊຸມຊົນເຂົ້າໃຈວຽກງານຂອງໂຮງຮຽນ ແລະ ຊຸມຊົນອາດຖືກກະຕຸ້ນທີ່ຈະສະໜັບສະໜູນວຽກງານຂອງຄູ.

ກິດຈະກຳປະຕິບັດ: ການສັງເກດຄວາມແຕກຕ່າງຫລາກຫລາຍ

1. ຂຽນຊື່ເດັກນັກຮຽນໃນຫ້ອງຮຽນຂອງທ່ານ ຜູ້ທີ່ເຫັນຈະແຈ້ງແລ້ວວ່າຮຽນແຂງ/ເກັ່ງວິຊາໃດແດ່?
2. ເຊັ່ນ ວິຊາຄະນິດສາດ, ເກັ່ງພາກຂຽນ, ມີທັກສະໃນການສົນທະນາ ແລະ ອື່ນໆ. ໃຫ້ບັນລະຍາຍຈຸດແຂງນັ້ນມີວິທີສະແດງ/ສາທິດອອກໃນຫ້ອງຮຽນແນວໃດ?.
3. ຂຽນຊື່ເດັກນັກຮຽນຜູ້ທີ່ມີພອນສະຫວັນອື່ນໆ ທີ່ອາດກ່ຽວພັນໂດຍທາງອ້ອມກັບການຮຽນຮູ້ໃນຫ້ອງຮຽນ. ມີເດັກທີ່ເປັນນັກອອກແບບທີ່ດີບໍ? ເດັກຄົນອື່ນສະແດງອອກການປະສານງານທີ່ດີໃນເກມກິລາບໍ? ອີກຄົນມີທັກສະດີເລີດດ້ານສັງຄົມບໍ?

ຕົວຢ່າງ: ເດັກທີ່ເປັນດາວຊິນໂດຣມ (ສະໝອງພິການ) ປົກກະຕິແລ້ວຈະມີທັກສະທາງ

ສັງຄົມດີທີ່ສຸດ.

4. ບັດນີ້, ໃຫ້ແຕ້ມຮູບວົງກົມໃສ່ເຈ້ຍກະດາດເພື່ອນຳສະເໜີເດັກທີ່ເຫລືອ ເຊິ່ງເປັນເດັກທີ່ທີ່ບໍ່ທັນໄດ້ເຊື່ອມໂຍງກັບທັກສະ ຫລື ພອນສະຫວັນພິເສດຂອງເຂົາ.ໃນອາທິດຕໍ່ໄປ ໃຫສັງເກດເດັກເຫລົ່ານີ້ຢ່າງໃກ້ຊິດ. ຖ້າຫາກທ່ານສັງເກດເຫັນເດັກຄົນໃດຄົນໜຶ່ງ ມັກກິດຈະກຳໃດໜຶ່ງໃຫ້ຈົດໄວ້. ກິດຈະກຳນີ້ຫລືວ່າເດັກທີ່ປະຕິບັດກິດຈະກຳນີ້ຈະສະທ້ອນໃຫ້ເຫັນວິທີຮຽນຮູ້ຂອງເຂົາຄືແນວໃດ? ວິທີການເຫລົ່ານີ້ ຈະສາມາດສອດແຊກເຂົ້າໄປໃນບົດສອນຂອງທ່ານໄດ້ຢ່າງໃດ?

ໃນການສັງເກດ ແລະ ການຮັບມືແກ້ໄຂບັນຫາຄວາມຫລາກຫລາຍ, ພວກເຮົາຈຳເປັນຕ້ອງກຳນົດໃຫ້ໄດ້ສິ່ງທີ່ເຮົາຈະສາມາດຈັດຫາອັນໃດມາຊ່ອຍ. ນັ້ນຄືວິທີຊ່ອຍເຫລືອທີ່ດີເພື່ອໃຫ້ເດັກຮຽນຮູ້ ໂດຍສະເພາະ ເດັກທີ່ມີບັນຫາດ້ານການຮຽນຮູ້. ພວກເຮົາບໍ່ຄວນເລັ່ງໃສ່ວ່າຕ້ອງ “ຢຸດເຊົາ” ເມື່ອໃດ ເຊັ່ນ ເບິ່ງເວລາ, ຄວນຈະສົນໃຈຜົນປະໂຫຍດຂອງການຮຽນຮູ້ ສຳລັບເດັກຂອງເຮົາ. ຕົວຢ່າງ: ພວກເຮົາສາມາດຂໍໃຫ້ເດັກອີກຜູ້ໜຶ່ງອ່ານໃຫ້ ແລະ ເປັນຜູ້ຂຽນໃຫ້ໄດ້ບໍ? ໃນຂະນະດຽວກັນພວກເຮົາ

ສາມາດລະບຸທັກສະທີ່ມີຄຸນຄ່າຂອງເດັກທີ່ມີຄວາມຫຍຸ້ງຍາກ ແລະ ຂາຄູ່ຂອງລາວຈະສາມາດຮຽນທັກສະເຫລົ່ານີ້ໄດ້ຄືແນວໃດ? ເວົ້າອີກຢ່າງໜຶ່ງ, ພວກເຮົາຈຳເປັນຕອ້ງສ້າງຕັ້ງຄວາມສຳພັນເຊິ່ງເດັກທັງຄູ່ຈະສາມາດປະກອບສ່ວນຊ່ອຍເຫລືອກັນຮຽນຮູ້.

4.3 ສິ່ງທ້າທາຍຕໍ່ກັບຄວາມແຕກຕ່າງຫລາກຫລາຍ

ການມີເດັກທີ່ມີຄວາມແຕກຕ່າງກັນໂດຍທີ່ມີພື້ນເພ(ພູມຫຼັງ) ແລະ ຄວາມສາມາດແຕກຕ່າງກັນໃນຫ້ອງຮຽນຮ່ວມຖືວ່າມັນມີຄວາມທ້າທາຍ. ພວກເຮົາຈຳເປັນຕ້ອງພິຈາລະນາສິ່ງທີ່ເດັກຕ້ອງການທີ່ຈະຮຽນຮູ້ ແລະ ລາວຈະຮຽນດ້ວຍວິທີໃດຈຶ່ງຈະຮຽນໄດ້ດີທີ່ສຸດ. ພວກເຮົາຕ້ອງຄົ້ນໃຫ້ພົບວິທີເຮັດໃຫ້ເດັກທຸກຄົນຕ້ອງການຢາກຮຽນຮ່ວມກັນຢ່າງມີຄວາມສຸກ. ອຸປະສັກທີ່ທ້າທາຍ 3 ຢ່າງ ທີ່ກີດກັ້ນການຮຽນຮ່ວມກັນຂອງເດັກມີຄື: ການຂົ່ມເຫັງ, ຄວາມອະຄະຕິ ແລະ ການຈຳແນກ.

ກ. ການຂົ່ມເຫັງ

ການຂົ່ມເຫັງແມ່ນຮູບການໜຶ່ງຂອງຄວາມຮຸນແຮງ. ໃນປຶ້ມເຫລັ້ມ 3 ກ່ຽວກັບການສ້າງສະພາບແວດລ້ອມທີ່ຖືກສຸຂະລັກສະນະ ແລະ ມີການປົກປ້ອງ, ພວກເຮົາຈະໄດ້ຮຽນຮູ້ຮູບແບບອື່ນໆ ຂອງຄວາມຮຸນແຮງທີ່ອາດມີໃນໂຮງຮຽນ, ພວກເຮົາຈະສ້າງແຜນທີ່ຄວາມຮຸນແຮງຢ່າງໃດ ແລະ ຈະພັດທະນານະໂຍບາຍ ແລະ ກົດຈະການທີ່ມີປະສິດທິພາບຂອງໂຮງຮຽນ ເພື່ອຕ້ານຄວາມຮຸນແຮງໄດ້ຄືແນວໃດ? ໃນປຶ້ມຄູ່ມືເຫລັ້ມນີ້ ພວກເຮົາຈະເບິ່ງເລື່ອງການຂົ່ມເຫັງລັງແກ ໂດຍສະເພາະເພາະວ່າການຂົ່ມຂູ່ ແລະ ຄວາມຢ້ານກົວສາມາດກີດກັນເດັກບໍ່ໃຫ້ມາຮຽນໃນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ເມື່ອຄິດເຖິງການຂົ່ມເຫັງ,ປົກກະຕິແລ້ວພວກເຮົາຈະຄິດເຖິງເດັກ ຫລື ກຸ່ມເດັກກຸ່ມໜຶ່ງ(ຜູ້ຂົ່ມເຫັງ) ຂົ່ມຂູ່ເດັກຜູ້ອື່ນຜູ້ຖືກຂົ່ມເຫັງ(ເປັນເຫຍື່ອ)ເລື້ອຍໆ ຍ້ອນວ່າຜູ້ເປັນເຫຍື່ອມີຄວາມແຕກຕ່າງໝູ່ແນວໃດແນວໜຶ່ງ. ພວກເຂົາອາດຈະຮຽນເກັ່ງກວ່າ (ໄດ້ຄະແນນດີກວ່າ) ກຸ່ມຜູ້ຂົ່ມເຫັງ; ເຂົາອາດມາຈາກກຸ່ມທີ່ມີວັດທະນະທຳແຕກຕ່າງເຊັ່ນນັບຖືສາສະໜາຕ່າງ; ຫລື ອາດເປັນເພາະເຂົາເປັນຄົນທຸກຍາກ. ພຶດຕິກຳຂອງຜູ້ໃຫຍ່ ຫລື ຄູບໍ່ສະເພາະແຕ່ເດັກ ກໍສາມາດພິຈາລະ ນາວ່າເປັນການຂົ່ມເຫັງໄດ້. ມີ ຫລາຍຮູບແບບຂອງການຂົ່ມເຫັງ, ຕົວຢ່າງ:

- ຂົ່ມເຫັງທາງຮ່າງກາຍ ເຊັ່ນ ຖີກໜູ, ຄູ ຫລື ຜູ້ດູແລຕີ; ຂົ່ມເຫັງທາງແນວຄິດຈິດໃຈ ຢູ່ບ່ອນວ່າຄວາມຄິດເຫັນຂອງເດັກຖືກປະຖິ້ມ ຫລື ບໍ່ເຫັນຄຸນຄ່າ;
- ຂົ່ມເຫັງທາງອາລົມຄວາມຮູ້ສຶກ ເນື່ອງຈາກຊ່ວງເວລາມີຄວາມພູມໃຈໃນຕົນເອງຕ່ຳ, ຮາວີລົບກວນການທຳໃຫ້ເຂີນອາຍ ຫລື ຍົກເລີກການຊຸມເຊີຍໃຫ້ລາງວັນໃນໂຮງຮຽນ ເຊິ່ງອາດກ່ຽວພັນເຖິງການຂົ່ມຂູ່ທາງແນວຄິດປັນຍາ;
- ຂົ່ມເຫັງດ້ວຍຖ້ອຍຄຳ ເຊັ່ນ ການເອີ້ນຊື່, ການດູຖູກຢຽບຫຍາມ, ການຫລອກລ້ ແລະ ຄຳເວົ້າທີ່ເປັນການແບ່ງແຍກເຊື້ອຊາດ;
- ຂົ່ມເຫັງໂດຍທາງອ້ອມເຊັ່ນ ການກະຈາຍຂ່າວລື ຫລື ການຄັດອອກໃຜຜູ້ໜຶ່ງຈາກກຸ່ມສັງຄົມ.
- ຂົ່ມເຫັງທາງວັດທະນະທຳ ຫລື ສັງຄົມເຊິ່ງເກີດຈາກຄວາມມີອະຄະຕິ ຫລື ການຈຳແນກເນື່ອງຈາກມີຄວາມແຕກຕ່າງໃນຫ້ອງຮຽນ, ກຸ່ມຊົນເຜົ່າ, ຊົນຊັ້ນວັນນະ, ເພດ ແລະ ອື່ນໆ.

ການຂົ່ມເຫັງປົກກະຕິຈະມີບາງຮູບແບບຂອງພຶດຕິກຳກ້າວລ້ວງ ເຊິ່ງເຮັດໃຫ້ເຈັບປວດ ແລະ ມີເຈຕະນາ. ມັນສາມາດແກ່ຍາວເປັນຫລາຍອາທິດຫລາຍເດືອນ ຫລື ຫລາຍປີ. ຖ້າປາສະ

ຈາກຜູ້ໃຫ້ຄຳແນະນຳການຊ່ວຍເຫລືອ ຈະມີຄວາມຫຍຸ້ງຍາກສະເໝີ ສຳລັບເດັກທີ່ຖືກຂົ່ມເຫັງທີ່ຈະປ້ອງກັນຕົນເອງ.

ໃນສັງຄົມທີ່ແຕກຕ່າງກັນ ໝູ່ ມັກຈະຖືກຂົ່ມເຫັງສະເໝີ. ຄວາມແຕກຕ່າງຂອງເຂົາອາດເປັນ ເພາະວ່າຕ່າງເພດ, ຕ່າງເຜົ່າ, ພິການ ຫລື ມີລັກສະນະພິເສດຕ່າງໝູ່. ເຖິງວ່າເດັກຊາຍ ມັກຈະກ່ຽວຂ້ອງກັບກິດຈະກຳການລົບກວນທາງຮ່າງກາຍ, ສ່ວນເດັກຍິງມັກຈະໃຊ້ຮູບແບບມີເລ້ຫລ່ຽມ ແລະ ໂດຍທາງອ້ອມຫລາຍກວ່າ ເຊັ່ນ ການຢອກລໍ້ ແລະ ອາດຂົ່ມເຫັງສຽດສີແບບເປັນກຸ່ມຫລາຍກວ່າຈະເຮັດພຽງລຳພັງ.

ເດັກທີ່ຖືກຂົ່ມເຫັງ ມັກຈະບໍ່ຍອມຮັບວ່າຖືກຂົ່ມເຫັງ ເພາະຢ້ານວ່າຈະຖືກຂົ່ມເຫັງເພີ້ມຂຶ້ນ. ສຳລັບເດັກທີ່ຖືກທຳຮ້າຍຈາກຜູ້ໃຫຍ່ ເຂົາອາດບໍ່ຕ້ອງການຍອມຮັບມັນ ເພາະເຂົາຢ້ານຜູ້ໃຫຍ່ ແລະ ອາດເປັນໄປໄດ້ທີ່ຈະເປັນຜູ້ໃຫຍ່ໂດຍທົ່ວໄປອີກ.

ສຳລັບຄູ ມັນກໍເປັນການຍາກທີ່ຈະຮັບມືແກ້ໄຂການຂົ່ມເຫັງ ຍ້ອນວ່າ ມັນມັກຈະເກີດຂຶ້ນຢູ່ນອກ ຫ້ອງຮຽນ ເຊັ່ນ ເກີດຂຶ້ນຕາມທາງໄປໂຮງຮຽນ ຫລື ຢູ່ບ່ອນຫລິ້ນ. ຢ່າງໃດກໍຕາມ, ຜົນຂອງ ການຂົ່ມຂູ່ປົກກະຕິແລ້ວ ຈະມີອິດທິພົນຕໍ່ການຮຽນດີ ຫລື ແນວໃດ ຂອງເດັກທີ່ຖືກທຳຮ້າຍໃນ ຫ້ອງ ຮຽນຂອງເຮົາ.

ພວກເຮົາຈຳເປັນຕ້ອງດຳເນີນການຢ່າງຈິງຈັງ ແລະ ຊອກຫາຊ່ອງທາງ ເພື່ອໃຫ້ຮູ້ຂອບເຂດຂອງການຂົ່ມເຫັງໃນຫ້ອງຮຽນ. ການສັງເກດແມ່ນທັກສະຕົ້ນຕໍ ແລະ ພວກເຮົາຈຳຕ້ອງສັງເກດເດັກໃນລະຫວ່າງທີ່ເຂົາພວມຫລິ້ນ ກໍຄືຢູ່ໃນຫ້ອງຮຽນ. ເດັກຜູ້ທີ່ມັກຢູ່ຄົນດຽວ, ຜູ້ທີ່ມີເພື່ອນໜ້ອຍຄົນ ຫລື ຜູ້ທີ່ແຕກຕ່າງໝູ່ ດ້ານໃດໜຶ່ງອາດສາມາດເປັນເປົ້າຫມາຍເພື່ອການຂົ່ມເຫັງ. ສັນຍານບອກເຖິງການຂົ່ມເຫັງປະກອບດ້ວຍ :

- ເດັກຜູ້ທີ່ເສຍຄວາມໝັ້ນໃຈຢ່າງກະທັນຫັນ ;
- ເດັກຜູ້ທີ່ຫລີກລ້ຽງການປະສົບສາຍຕາ ແລະ ກາຍເປັນຄົນງຽບ ;
- ເດັກຜູ້ທີ່ມີຜົນການຮຽນອ່ອນ ແຕ່ເມື່ອກ່ອນເປັນຄົນຮຽນດີ
- ເດັກຜູ້ທີ່ເລີ້ມມາໂຮງຮຽນບໍ່ປົກກະຕິ ຫລື ເລີ້ມເຈັບຫົວ ຫລື ເຈັບກະເພາະແບບອະທິບາຍບໍ່ໄດ້.

ການສົນທະນາອະພິປາຍກັບຜູ້ປົກຄອງ ຫລື ຜູ້ດູແລແມ່ນຈຳເປັນ, ແຕ່ພວກເຮົາຄວນຕື່ນຕົວຕໍ່ການປ່ຽນແປງພຶດຕິກຳໃນຕົວເດັກ. ພວກເຮົາຄວນບັນທຶກ ເພື່ອລະບຸການປ່ຽນແປງໃນແບບແຜນພຶດຕິກຳຂອງເດັກ ທີ່ອາດສະທ້ອນພາບການຂົ່ມເຫັງ. ຍັງມີຄວາມເປັນໄປໄດ້. ໃນການ

ດຳເນີນການສຳຫລວດ ເພື່ອໃຫ້ໄດ້ພາບຂອງຄວາມສຳພັນພາຍໃນຫ້ອງ ຫລື ໂຮງຮຽນ. ແບບສຳພາດ 2 ແບບຈະໄດ້ນຳສະເໜີຂ້າງລຸ່ມ. ແບບທຳອິດເປັນລາຍການກວດກາແບບໄວ ກ່ຽວກັບພຶດຕິກຳຂົ່ມເຫັງ. ແບບທີ 2 ເປັນແບບສອບຖາມ ທີ່ລະອຽດກວ່າເພື່ອຈະເກັບຄຳຕອບ ກ່ຽວກັບຄວາມສຳພັນພາຍໃນ ແລະ ຮອບໆໂຮງຮຽນ ແລະ ຫ້ອງຮຽນຂອງພວກເຮົາ. ທ່ານສາມາດຂໍໃຫ້ນັກຮຽນໃນຫ້ອງຕອບແບບສອບຖາມ ໂດຍບໍ່ຂຽນຊື່ຜູ້ຕອບ.

1. ປະກິດການການຂົ່ມເຫັງ

	ບໍ່ເຄີຍມີ	**ເຄີຍຄັ້ງໜຶ່ງ**	**ເຄີຍຫລາຍກວ່າໜຶ່ງຄັ້ງ**
ຂ້ອຍເຄີຍຖືກຍູ້, ຖືກແຕະ ຫລືຖືກຕີໂດຍເຈຕະນາ			
ເດັກຜູ້ອື່ນເວົ້າເລື່ອງບໍ່ດີກ່ຽວກັບຂ້ອຍ			
ຂ້ອຍຖືກໝູ່ຍາດເອົາສິ່ງຂອງ			
ຂ້ອຍຖືກເອີ້ນຊື່ທີ່ໜ້າລັງກຽດເພາະວ່າ ຂ້ອຍມີອັນແຕກຕ່າງຈາກຜູ້ອື່ນ			
ຂ້ອຍຖືກເອີ້ນຊື່ທີ່ໜ້າລັງກຽດເພາະ ເຫດຜົນອື່ນໆ			
ຂ້ອຍຖືກຫົວຂວັນ ຫລືຖືກດູຖູກ ຢ່າງບໍ່ມີເຫດຜົນ			
ຂ້ອຍຖືກກັນບໍ່ໃຫ້ຫລິ້ນເກມນຳໝູ່ໂດຍເຈຕະນາ			
ບາງຄົນເຮັດແນວບໍ່ດີກັບຂ້ອຍດ້ວຍວິທີອື່ນໆ			

2. ແບບສອບຖາມກ່ຽວກັບຄວາມສຳພັນ

ຂ້ອຍເປັນເດັກຊາຍ_____ ຂ້ອຍເປັນເດັກຍິງ_____

ອາຍຸ_____ ອາຍຸ_____

ໃນຊ່ວງອາທິດນີ້ ໃນໂຮງຮຽນ ມີເດັກຄົນອື່ນ:	ບໍ່ເຄີຍມີ	ເຄີຍຄັ້ງໜຶ່ງ	ເຄີຍຫລາຍ ກວ່າໜຶ່ງຄັ້ງ
ເອີ້ນຊື່ຂ້ອຍ ເຊິ່ງຂ້ອຍບໍ່ມັກ			
ເວົ້າດີກັບຂ້ອຍ			
ພະຍາຍາມເຕະຂ້ອຍ			
ໃຫ້ຂອງຂວັນແກ່ຂ້ອຍ			
ເຮັດບໍ່ສຸພາບກັບຂ້ອຍ ເພາະຂ້ອຍແຕກຕ່າງໝູ່			
ເວົ້າວ່າພວກເຂົາຈະທຳຮ້າຍຂ້ອຍ			
ພະຍາຍາມໃຫ້ຂ້ອຍເອົາເງິນໃຫ້ ພວກເຂົາ			
ພະຍາຍາມເຮັດໃຫ້ຂ້ອຍຢ້ານ			
ຢຸດຂ້ອຍບໍ່ໃຫ້ຮ່ວມຫລິ້ນເກມນຳ			
ເລົ່າເລື່ອງຕະຫລົກ ແລະ ກໍ່ຫົວເຍາະເຍີ້ຍຂ້ອຍ			
ພະຍາຍາມໃຫ້ຂ້ອຍທຳຮ້າຍຜູ້ອື່ນ			
ຕົວະຂ້ອຍ ແລະ ເຮັດໃຫ້ຂ້ອຍຕົກຢູ່ໃນ ຄວາມລຳບາກ (ອັນຕະລາຍ)			
ຊ່ອຍຂ້ອຍຖືສິ່ງຂອງບາງຢ່າງ			
ຊ່ອຍຂ້ອຍເຮັດບົດຝຶກຫັດ			

ເວົ້າຫຍາບຄາຍກ່ຽວກັບລັກສະນະການ ຢ່າງຂອງຂ້ອຍ			
ເວົ້າຈາລາມົກເພາະຂ້ອຍມີສີຜິວຕ່າງໝູ່			
ຫລິ້ນເກມກັບຂ້ອຍ			
ພະຍາຍາມທຸບຂອງບາງຢ່າງ ຂອງຂ້ອຍ ໃຫ້ແຕກ			

ຫລັງຈາກວິເຄາະຜົນຂອງແບບສອບຖາມ, ພວກເຮົາສາມາດລະບຸໄດ້ ຜູ້ທີ່ຢາກບອກວ່າ ເຂົາພວມຖືກຂົ່ມເຫັງ ແລະ ຜູ້ທີ່ມີແນວໂນ້ມວ່າເປັນຜູ້ຂົ່ມເຫັງໝູ່. ຢ່າງໃດກໍຕາມ, ຈົ່ງລະວັງ. ເດັກບາງຄົນອາດເປັນເຫຍື່ອຂອງການຂົ່ມເຫັງ, ແຕ່ອາດຈະບໍ່ເຕັມໃຈຍອມຮັບ ພ້ອມທັງໃນແບບ ສອບຖາມນີ້. ເນື່ອງຈາກແບບສອບຖາມບໍ່ໄດ້ລະບຸຊື່, ຢ່າງນ້ອຍມັນກໍຊ່ວຍທ່ານເຂົ້າໃຈຂອບເຂດ ຂອງການຂົ່ມເຫັງກັນໃນຫ້ອງຂອງທ່ານ. ຈາກຂໍ້ມູນຂ່າວສານດັ່ງກ່າວ, ທ່ານສາມາດເລີ້ມວາງ ແຜນປະຕິບັດໃນຕໍ່ໜ້າກັບຄູຜູ້ອື່ນໆ: ຜູ້ປົກຄອງ, ຜູ້ດູແລ ແລະ ພວກເດັກນັກຮຽນເອງ.

ປະຕິບັດການເພື່ອຕໍ່ຕ້ານການຂົ່ມເຫັງ

ເພື່ອຫລຸດຜ່ອນການຂົ່ມເຫັງ, ຄູຈຳເປັນຕ້ອງດຳເນີນການຫລາຍຢ່າງເຊັ່ນ:

- ການນຳພາອອກກຳລັງກາຍເພື່ອຊ່ວຍເດັກໃຫ້ຜ່ອນຄາຍ ແລະ ລົດຄວາມຕຶງຄຽດ;
- ການເພີ້ມທະວີການຮຽນຮູ້ແບບຮ່ວມມືພາຍໃນຫ້ອງຮຽນ (ເດັກຊ່ວຍເຫລືອກັນໃນການ ຮູ້);
- ການປັບປຸງການຮັກສາສິດຜົນປະໂຫຍດຂອງເດັກ ໂດຍໃຫ້ອຳນາດເດັກທຸກຫລາຍຂຶ້ນ ເຊັ່ນ: ໃຫ້ພວກເຂົາສ້າງກົດລະບຽບຂອງຫ້ອງຮຽນ ແລະ ມີຄວາມຮັບຜິດຊອບພາຍໃນ ຄະນະກຳມະການນັກຮຽນ;
- ການເພີ້ມທະວີຄວາມຮັບຜິດຊອບພາຍໃນຫ້ອງຮຽນ ໂດຍການສ້າງຕັ້ງຄະນະກຳມະ ການ ແລະ ເຮັດວຽກໃກ້ຊິດຫລາຍຂຶ້ນ ກັບຜູ້ປົກຄອງ ແລະ ຊຸມຊົນທ້ອງຖິ່ນ;
- ການພັດທະນາຍຸດທະສາດເດັກສູ່ເດັກ ເພື່ອແກ້ໄຂຂໍ້ຂັດແຍ້ງ.

- ການອະນຸຍາດ ໃຫ້ເດັກລະບຸມາດຕະການດ້ານວິໄນອັນໃດ ທີ່ຄວນປະຕິບັດຕໍ່ຜູ້ທີ່ຂົ່ມເຫັງຜູ້ອື່ນ.

ຄູຍັງສາມາດໃຊ້ລະຄອນ ຫລື ຕຸກກະຕາ ເພື່ອສຳຫລວດຂອບເຂດຂອງການຂົ່ມເຫັງ, ສາເຫດຂອງມັນ ແລະ ທາງແກ້ເມື່ອມັນຫາກເກີດຂຶ້ນຢູ່ໃນ ຫລື ນອກໂຮງຮຽນ.ການສົນທະນາ ອະພິປາຍ ຫລື ໂຕ້ວາທີປະເດັນບັນຫາທີ່ລະອຽດອ່ອນ ກໍສາມາດນຳໃຊ້ຄວບຄູ່ກັບນິທານ (ບົດເລົ່າເລື່ອງ) ຫລື ການ ຫລົ້ນບົດບາດສົມມຸດ ເພື່ອໃຫ້ເດັກພະຍາຍາມເວົ້າແບບຢືນຢັນວ່າ “ບໍ່” ກໍຄື ເພື່ອຊອກຫາພາສາທີ່ຖືກ ຕ້ອງ ເພື່ອທີ່ຈະໃຊ້ຕ້ານການຂົ່ມເຫັງ ແລະ ຜູ້ທຳຮ້າຍ.

ຂ. ຄວາມອະຄະຕິ ແລະ ການຈຳແນກ

ສ່ວນຫລາຍຮາກເຫງົ້າຂອງການຂົ່ມເຫັງລັງແກ ແມ່ນຄວາມມີອະຄະຕິ(ພຶດຕິກຳ ຫລື ຄຳຄິດເຫັນກ່ຽວກັບຜູ້ຄົນທີ່ເລວຊາມ) ແລະ ການຈຳແນກ (ການແຍກແຍະທີ່ບໍ່ດີລະຫວ່າງກຸ່ມຄົນ; “ພວກເຂົາ” ປະຈັນບານກັບ “ພວກເຮົາ”). ວິທີການໜຶ່ງທີ່ຈະເຂົ້າໃຈຄວາມອະຄະຕິ ແລະ ການຈຳແນກເກີດຂຶ້ນໃນຫ້ອງຮຽນ ແລະ ໂຮງຮຽນເຮົາຄືແນວໃດ ແມ່ນການສຳຫລວດເບິ່ງປະສົບການຂອງພວກເຮົາເອງ.

ກິດຈະກຳເພື່ອປະຕິບັດ: ຄວາມເຂົ້າໃຈ ການຈຳແນກ

ກິດຈະກຳນີ້ສາມາດນຳໃຊ້ກັບຄູ, ຜູ້ປົກຄອງ ຫລື ເດັກມີອາຍຸແລ້ວ. ຈຸດປະສົງແມ່ນ ເພື່ອພັດທະນາຄວາມເຂົ້າໃຈຂອງພວກເຂົາວ່າຮູບແບບຕ່າງໆ ຂອງການກີດຂີ່ຂົ່ມເຫັງໃນໂຮງຮຽນມີຜົນກະທົບຕໍ່ລາຍບຸກຄົນຢ່າງໃດ? ຍິ່ງກວ່ານັ້ນ ກິດຈະກຳນີ້ຍັງກະຕຸກຊຸກຍູ້ຄົນເຮົາໃຫ້ສະທ້ອນພາບຕົນເອງທີ່ອາດຈະໄດ້ຮັບຜົນກະທົບຄືແນວໃດ ຈາກຄວາມລຳອຽງມີອະຄະຕິ ແລະ ການຈຳແນກ.

ບົດຮຽນທີ່ສຳຄັນຫລາຍບົດສາມາດກຳເນີດເກີດຂຶ້ນ ຈາກກິດຈະກຳນີ້ດັ່ງເຊັ່ນ ຕົວຢ່າງຕໍ່ໄປນີ້:

- ແຕ່ລະຄົນສາມາດເປັນໄດ້ທັງເຫຍື່ອທີ່ຖືກຂົ່ມເຫັງ ແລະ ເປັນໄດ້ທັງຜູ້ທີ່ຈະຂົ່ມເຫັງຄົນອື່ນ.
- ແຕ່ລະລາຍບຸກຄົນຮູ້ຈັກຄວາມອະຄະຕິ ແລະ ການຈຳແນກທີ່ເກີດຂຶ້ນກັບເຂົາເຖິງວ່າຈະຍັງເປັນເດັກອາຍຸນ້ອຍ.

ແນະນຳວິທີປະຕິບັດກິດຈະກຳ:ເວລາທີ່ໃຊ້ສຳລັບກິດຈະກຳນີ້ຈະຂຶ້ນຢູ່ກັບຂະໜາດຂອງຫ້ອງຮຽນ ຫລືກຸ່ມຜູ້ເຂົ້າຮ່ວມ. ໃຫ້ເວລາ 10 ນາທີຕໍ່ນັກຮຽນ ຫລື ຈຳນວນນັກຮຽນໃນແຕ່ລະກຸ່ມນ້ອຍ.

ແບ່ງຜູ້ເຂົ້າຮ່ວມເປັນກຸ່ມ5-6ຄົນ. ບອກໃຫ້ພວກເຂົາແລກປ່ຽນເລື່ອງທີ່ພວກເຂົາເຄີຍໄດ້ເຫັນຄວາມອະຄະຕິ ຫລື ເຄີຍປະສົບກັບການຈຳແນກໃນໂຮງຮຽນ. ການບອກໄປ້ ແລະ ແນະນຳຈັກສອງສາມຢ່າງຈະເປັນການຊ່ວຍທີ່ດີເຊັ່ນ:

1. ປະຕິບັດການທີ່ເປັນອະຄະຕິ ຫລື ຈຳແນກ ບໍ່ຈຳເປັນຕ້ອງເປັນການຕັ້ງໃຈ.
2. ປະສົບການຂອງພວກເຂົາສາມາດກ່ຽວໂຍງນັກຮຽນ, ຄູ, ຜູ້ບໍລິຫານ ຫລື ອາດຈະກ່ຽວໂຍງພຽງບັນຍາກາດທົ່ວໄປຂອງໂຮງຮຽນ.
3. ໃຫ້ບອກວ່າພວກເຂົາອາດຄິດກ່ຽວກັບຫລັກສູດ, ແບບວິທີສິດສອນ, ອຸປະກອນການສຶກສາ, ຄວາມສຳພັນ ຫລື ດ້ານອື່ນໆ ຂອງສະພາບແວດລ້ອມໂຮງຮຽນ.
4. ໃຫ້ເຕືອນ ຜູ້ເຂົ້າຮ່ວມກິດຈະກຳວ່າເອກະລັກບຸກຄົນສາມາດເບິ່ງເຫັນໄດ້ ໃນຫລາຍມິຕິ ຫລື ຫລາຍມຸມ. ໂດຍປົກກະຕິຄົນເຮົາຈະຄິດກ່ຽວກັບເຊື້ອຊາດ ຫລື ຊົນເຜົ່າໄດ້ທັນທີໃນກິດຈະກຳນີ້. ພະຍາຍາມຊ່ວຍພວກເຂົາ ໃຫ້ເຫັນມິຕິ/ມຸມອື່ນໆ ຂອງການຈຳແນກ ຫລື ຄວາມອະຄະຕິ ເຊັ່ນ ຄວາມເຊື່ອທີ່ວ່າ ເດັກຍິງຮຽນວິທະຍາສາດບໍ່ເກ່ງ ຫລື ເດັກພິການບໍ່ສາມາດຫລິ້ນກິລາໄດ້.
5. ທ້າຍສຸດ, ໃຫ້ແນະນຳວ່າ ປະສົບການຂອງພວກເຂົາອາດສາມາດເຄີຍເປັນທັງຜູ້ຖືກຂົ່ມເຫັງ ແລະ ເປັນຜູ້ຂົ່ມເຫັງກໍໄດ້.ມີໜ້ອຍຄົນທີ່ຈະເລືອກກໍລະນີຫລັງ, ແຕ່ຖ້າມີຜູ້ເລືອກມັນຈະເປັນນາທີທີ່ມີພະລັງສຳລັບການສະທ້ອນພາບຄືນ.

ໃຫ້ເວລາຜູ້ເຂົ້າຮ່ວມຜູ້ລະ 5 ນາທີ ເພື່ອແລກປ່ຽນເລື່ອງລາວຂອງເຂົາ ແລະ ຖ້າມີຄວາມຈຳເປັນໃຫ້ເວລາຕື່ມອີກ 5 ນາທີເພື່ອໃຫ້ເຂົາເຈົ້າຕອບຄຳຖາມ ກ່ຽວກັບປະສົບການຂອງເຂົາເຈົ້າ. ມັນເປັນສິ່ງສຳຄັນທີ່ຈະຮຽນຮູ້ປະສົບການຂອງທຸກຄົນ ແລະ ຖອດຖອນ ໃຫ້ໄດ້ວ່າເຫດການນັ້ນໆ ເຮັດໃຫ້ຄົນເຮົາຮູ້ສຶກແນວໃດ? ເມື່ອມັນເກີດຂຶ້ນ. ທ່ານອາດຖາມແຕ່ລະຄົນດ້ວຍວ່າປະສົບການຂອງເຂົາເຈົ້າມີຜົນກະທົບຕໍ່ທັດສະນະຄະຕິ ແລະ ພຶດຕິກຳ ຫລື ແນວຄິດຂອງເຂົາເອງຄືແນວໃດ? ກ່ຽວກັບວິທີທີ່ອາດສາມາດຫລີກລ້ຽງ ສະຖານະການນັ້ນ.

ເມື່ອແຕ່ລະຄົນມີໂອກາດໄດ້ເລົ່າເລື່ອງແລ້ວ, ທ່ານສາມາດຖາມຫລາຍໆຄຳຖາມ ເພື່ອເລີ້ມການສົນທະນາອະພິປາຍກ່ຽວກັບຄວາມອະຄະຕິ ແລະ ການຈຳແນກໃນຫ້ອງຮຽນ ແລະ ໂຮງຮຽນ.

1. ທ່ານຮູ້ສຶກແນວໃດ ທີ່ໄດ້ຮ່ວມເລົ່າເລື່ອງສ່ວນຕົວ ກ່ຽວກັບຄວາມອະຄະຕິ ແລະ ການຈຳແນກ?
2. ທ່ານໄດ້ຮຽນຮູ້ຫຍັງແດ່ ຈາກປະສົບການຂອງທ່ານເອງ ກໍຄື ຈາກບົດເລົ່າເລື່ອງຂອງຄົນອື່ນທີ່ອາດນຳທ່ານໄປສູ່ການກະທຳ ທີ່ແຕກຕ່າງໃນການສິດສອນ ຫລື ໃນຊີວິດປະຈຳວັນ

ຂອງທ່ານເອງ?

3. ມີຄວາມເຊື່ອມສຳພັນຫຍັງແດ່ ທີ່ທ່ານພົບໃນບົດເລື່ອງຕ່າງໆ? ມີອັນໃດແດ່ຕົງກັນທີ່ໜ້າສົນໃຈ?
4. ມີໃຜແດ່ທີ່ມີຄວາມລຳບາກໃນການຈົດຈຳເຫດການ ຫລື ການຊີ້ແຈງເວລາລາວຮູ້ ຈັກວ່າມີຄວາມອະຄະຕິ ຫລື ການຈຳແນກຕອນທຳອິດໃນໂຮງຮຽນ? ຖ້າເປັນແນວນັ້ນ, ແມ່ນຍ້ອນເຫດໃດ?
5. ເລື່ອງລາວຕ່າງໆ ທີ່ຜູ້ອື່ນເລົ່າໄດ້ທົບທວນຄວາມຈຳຂອງທ່ານ ເພີ້ມກ່ຽວກັບເຫດການໃນປະສົບການຂອງຕົນບໍ?

ບົດທີ 5

ການແກ້ໄຂບັນຫາຄວາມຮຸນແຮງແລະ ການຫັນນະໂຍບາຍສູ່ການປະຕິບັດ

ເມື່ອເຂົ້າໂຮງຮຽນແລ້ວ, ເດັກທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງຈາກໝູ່ ມັກຈະເປັນຜູ້ທີ່ຖືກຈຳແນກ ແລະ ພົບກັບຄວາມຮຸນແຮງສະເໝີ. ສ່ວນໃຫຍ່ຈະຖືກເລັ່ງໃສ່ “ຄວາມແຕກຕ່າງ” ຂອງເຂົາຈາກຜູ້ອື່ນໆ ແລະ ຈະຫາທາງຜັກດັນໃຫ້ເຂົາອອກຫ່າງຈາກໝູ່ ໃນໂຮງຮຽນ ແລະ ຢູ່ນອກໂຮງຮຽນເປັນບາງຄັ້ງ. ຮ້າຍແຮງໄປກວ່ານັ້ນສິ່ງດັ່ງກ່າວຈະພົວພັນ ກັບການລວນລາມທາງເພດ ແລະ ການທຳຮ້າຍຮ່າງກາຍເຊິ່ງສາມາດນຳໄປສູ່ການເສຍຊີວິດ.

ຄວາມຮຸນແຮງສາມາດປະຕິບັດໄດ້ໃນຫຼາຍຮູບແບບ ແລະ ຖືກເຂົ້າໃຈຢ່າງແຕກຕ່າງ ກັນໃນວັດທະນະທຳທີ່ແຕກຕ່າງກັນ. ຢູ່ໃນຊຸດເຄື່ອງມືເຫຼັ້ມນີ້ ຄວາມຮຸນແຮງໝາຍເຖິງການ ໃນໃດໜຶ່ງ. ມັນຈະມີຜົນໃຫ້ເກີດການບາດເຈັບ, ເສຍຊີວິດ, ທຳລາຍທາງຈິດໃຈ, ການພັດທະ ນາທາງຮ່າງກາຍຊຸດໂຊມ ຫຼື ສູນເສຍການພັດທະນາ.

1 ຮູບແບບຂອງຄວາມຮຸນແຮງທີ່ເປັນພື້ນຖານ.

ກ. ຮູບແບບຂອງຄວາມຮຸນແຮງ

- **ຄວາມຮຸນແຮງຕໍ່ຕົນເອງ** ໝາຍເຖິງພຶດຕິກຳທີ່ມີເຈດຕະນາ ແລະ ທຳຮ້າຍຕົນເອງ ໂດຍກົງ. ສຳລັບເລື່ອງນີ້ການຂ້າຕົວຕາຍຈະນຳໄປສູ່ຜົນຮັບທີ່ເປັນຄວາມຕາຍ. ຮູບແບບອື່ນໆ ຈະປະກອບມີຄວາມພະຍາຍາມຂ້າຕົວຕາຍ ແລະ ພຶດຕິກຳຕ່າງໆ ທີ່ຕັ້ງໃຈທຳລາຍຕົວເອງ, ແຕ່ບໍ່ເຖິງຕາຍ (ເຊັ່ນ ການທຳລາຍອະໄວຍະວະຮ່າງກາຍຂອງຕົນ).

-ຄວາມຮຸນແຮງລະຫວ່າງບຸກຄົນ ແມ່ນພຶດຕິກຳຮຸນແຮງລະຫວ່າງບຸກຄົນ ແລະ ສາ ມາດແຍກປະເພດ ໄດ້ດີທີ່ສຸດໂດຍການພົວພັນລະຫວ່າງຜູ້ເປັນເຫຍື່ອ-ຜູ້ກະທຳຜິດ. ຮູບແບບ ຕ່າງຂອງຄວາມຮຸນແຮງລະຫວ່າງບຸກຄົນປະກອບມີການຂົ່ມເຫັງ ແລະ ການລວນລາທຳຮ້າຍ.

- **ຄວາມຮຸນແຮງທີ່ມີການຈັດຕັ້ງ** ແມ່ນພຶດຕິກຳຮຸນແຮງທີ່ສະແດງອອກໂດຍກຸ່ມສັງຄົມຫຼື ການເມືອງທີ່ໄດ້ຮັບແຮງຈູງໃຈ ຈາກຈຸດມຸ້ງໝາຍສະເພາະໃດໜຶ່ງທາງການເມືອງ, ເສຖະກິດ ຫຼື ສັງຄົມ ຕົວຢ່າງ ໃນທີ່ນີ້ປະກອບມີຄວາມຂັດແຍ່ງທາງຜິວພັນ ຫຼື ສາສະໜາທີ່ເກີດຂຶ້ນລະ ຫວ່າງກຸ່ມ, ແກ້ງ ຫຼື ກຸ່ມປະທ້ວງຕ່າງໆ.

ຂ. ສາເຫດຂອງຄວາມຮຸນແຮງ.

ສາເຫດຂອງຄວາມຮຸນແຮງຈະສະຫຼັບຊັບຊ້ອນ ແລະ ແຕກຕ່າງກັນໄປ ຢູ່ຂ້າງລຸ່ມນີ້ ຈະເປັນບັນດາປັດໄຈຕ່າງໆ ທີ່ຄິດວ່າເປັນຕົວຊ່ວຍໃຫ້ກໍ່ເກີດພຶດຕິກຳຮຸນແຮງ. ທ່ານສາມາດ ໃຊ້ປັດໄຈເຫຼົ່ານີ້ ແລະ ຂະຫຍາຍມັນກວ້າງອອກໄປໄດ້ອີກ ເພື່ອປະເມີນເບິ່ງວ່າເດັກໃນໂຮງ ຮຽນຂອງທ່ານ, ຄອບຄົວ ແລະ ຊຸມຊົນ ມີເງື່ອນໄຂຈູງໃຈໃຫ້ກະທຳຄວາມຮຸນແຮງໄດ້ຢ່າງໃດ ແລະ ນະໂຍບາຍໂຮງຮຽນ ລວມທັງແຜນງານ/ໂຄງການມີຄວາມຈຳເປັນ ເພື່ອຫຼຸດຜ່ອນ ຫຼື ກຳຈັດມັນ ຫຼື ບໍ່?

ສາເຫດຕ່າງໆ ຂອງຄວາມຮຸນແຮງ: ສິ່ງເຫຼົ່ານີ້ ມີຢູ່ໃນໂຮງຮຽນຂອງພວກທ່ານ ຫຼືບໍ່? [1]

ຄຸນລັກສະນະລະດັບເດັກ

- ຍັງມີຂໍ້ຂາດຕົກບົກຜ່ອງດ້ານຄວາມຮູ້, ທັດສະນະຄະຕິ, ຄວາມຄິດກ່ຽວກັບຄວາມຮຸນແຮງ ແລະ ທັກສະ ເຊັ່ນ ທັກສະການສື່ສານໄດ້ຮັບການພັດທະນາຕ່ຳ
- ເສບສິ່ງເສບຕິດ ແລະ ຂອງມຶນເມົາ (ເຫຼົ້າ/ເບຍ....)
- ເຄີຍເຫັນ ຫຼື ເຄີຍເປັນເຫຍື່ອຄວາມຮຸນແຮງລະຫວ່າງບຸກຄົນມາແລ້ວ
- ກ້າວເຂົ້າໄປເຖິງການນຳໃຊ້ປືນ ຫຼື ອາວຸດອື່ນໆ

ປັດໄຈທີ່ຊຸກຍູ້ສິ່ງເສີມໃນລະດັບຄອບຄົວ

- ຂາດຄວາມຮັກແພງ ແລະ ການສະໜັບສະໜູນຂອງພໍ່ແມ່ ຜູ້ປົກຄອງ
- ເຄີຍປະສົບພົບເຫັນຄວາມຮຸນແຮງໃນຄອບຄົວ
- ການລົງໂທດທາງດ້ານຮ່າງກາຍ ແລະ ການທາລຸນເດັກ
- ພໍ່ແມ່ ຜູ້ປົກຄອງ ຫຼື ອ້າຍເອື້ອຍນ້ອງມີສ່ວນຮ່ວມໃນພຶດຕິກຳທີ່ຜິດທາງອາຍາ

ປັດໄຈດ້ານຊຸມຊົນ ແລະ ສະພາບແວດລ້ອມອື່ນໆ ທີ່ສົ່ງເສີມຊຸກຍູ້ຄວາມຮຸນແຮງ

- ຄວາມບໍ່ເທົ່າທຽມກັນທາງເສດຖະກິດ - ສັງຄົມ, ການຫັນເປັນຕົວເມືອງ ແລະ ຄວາມແຕກຕ່າງ ວັດທະນະທຳຂອງປະຊາຊົນ.
- ລະດັບການວ່າງງານສູງໃນໝູ່ຄົນໄວໜຸ່ມ
- ອິດທິພົນຂອງສື່
- ສະພາບແວດລ້ອມຂອງສັງຄົມທີ່ສະໜັບສະໜູນຄວາມຮຸນແຮງ
- ການມີພ້ອມຂອງອາວຸດຕ່າງໆ

[1] ປັບຈາກ: World Health Organization (1998) WHO Information Series on School Health, Document Three- Violence Preventio : An Important Element of a Health- promoting School, Geneva

ຄ. ການສ້າງແຜນທີ່ຂອງຄວາມຮຸນແຮງ

ພວກເຮົາຫຼາຍຄົນອາດຈະຄິດບໍ່ເຖິງວ່າໂຮງຮຽນ ແລະ ຊຸມຊົນຂອງພວກເຮົາເປັນສະຖານທີ່ທີ່ມີຄວາມຮຸນແຮງ. ຖືວ່າເປັນໂຊກຮ້າຍທີ່ຄວາມຮຸນແຮງສ່ວນຫຼາຍເກີດຂຶ້ນໂດຍເຮົາສັງເກດບໍ່ໄດ້ ຍ້ອນວ່າໂດຍປົກກະຕິແລ້ວທັງຜູ້ເປັນເຫຍື່ອ ແລະ ຜູ້ກະທຳຜິດບໍ່ຢາກໃຫ້ຄູຂອງເຂົາຮູ້. ຍິ່ງໄປກວ່ານັ້ນ, ກໍລະນີຄວາມຮຸນແຮງອາດເກີດຂຶ້ນຢູ່ນອກໂຮງຮຽນ ເຊັ່ນ: ເມື່ອເດັກຖືກຫາລຸນເມື່ອເວລາໄປໂຮງຮຽນ, ຜົນກະທົບຂອງມັນຈະສະທ້ອນເຂົ້າໄປໃນໂຮງຮຽນ ແລະ ຫ້ອງຮຽນຂອງທ່ານ.

ການກຳນົດລະດັບຂອງຄວາມຮຸນແຮງໃນໂຮງຮຽນສາມາດທີ່ຈະເຮັດໄດ້ດ້ວຍຫຼາຍແນວທາງເຊັ່ນ:

ໂດຍການຂໍໃຫ້ນັກຮຽນຕອບແບບສອບຖາມ, ດຶງເຂົາເຂົ້າມາຮ່ວມກຸ່ມສົນທະນາ ຫຼື ໂດຍຜ່ານການສ້າງແຜນທີ່ຂອງຄວາມຮຸນແຮງ.

ການສ້າງແຜນທີ່ໂຮງຮຽນມີຈຸດມຸ້ງໝາຍເພື່ອກຳນົດວ່າບ່ອນໃດ ແລະ ເມື່ອໃດມີຄວາມຮຸນແຮງເກີດຂຶ້ນພາຍໃນໂຮງຮຽນ, ຄວາມຮຸນແຮງປະເພດໃດທີ່ກ່ຽວຂ້ອງ (ແບບກັບຕົນເອງ, ແບບລະຫວ່າງບຸກຄົນ ຫຼື ແບບຈັດຕັ້ງ), ແລະ ແມ່ນໃຜທີ່ເປັນເຫຍື່ອ ແລະ ເປັນຜູ້ກະທຳຜິດເປັນປະຈຳ. ຂະບວນການສ້າງແຜນທີ່ເປັນເຄື່ອງມືທີ່ມີຄຸນຄ່າ ສຳລັບ ການຕິດຕາມ ແລະ ຄວບຄຸມ ຄວາມຮຸນແຮງ ເພາະວ່າມັນສາມາດທີ່ຈະເຮັດໄດ້ດັ່ງນີ້:

1. ຊຸກຍູ້ນັກຮຽນ, ຄູ ແລະ ຜູ້ບໍລິຫານເພື່ອເລີ້ມການສົນທະນາ ກ່ຽວກັບຄວາມຮຸນແຮງໃນໂຮງຮຽນ ເຊິ່ງຈະນຳໄປສູ່ນະໂຍບາຍທີ່ມີປະສິດທິຜົນຫຼາຍຂຶ້ນ;
2. ຊ່ວຍໃນການປະເມີນຜົນແຜນງານ / ໂຄງການ ເຂົ້າແຊກແຊງແກ້ໄຂຄວາມຮຸນແຮງທີ່ຖືກສ້າງຂຶ້ນ ເພື່ອສະໜັບສະໜູນນະໂຍບາຍຕ້ານຄວາມຮຸນແຮງໃນໂຮງຮຽນ.
3. ເພີ້ມທະວີການເຂົ້າມີສ່ວນຮ່ວມຂອງໂຮງຮຽນ ໃນການແຊກແຊງເພື່ອແກ້ໄຂຄວາມຮຸນແຮງອື່ນໆ.

ເພື່ອສ້າງແຜນທີ່ຄວາມຮຸນແຮງໃນໂຮງຮຽນຂອງທ່ານ, ທ່ານສາມາດທີ່ຈະໃຊ້ຂະບວນການຄ້າຍຄືກັນກັບການສ້າງແຜນທີ່ໂຮງຮຽນຊຸມຊົນ ດັ່ງທີ່ໄດ້ສະເໜີມາກ່ອນແລ້ວ. ເລີ້ມຕົ້ນດ້ວຍການໃຫ້ແຜນທີ່ໂຮງຮຽນແກ່ຄູ ແລະ ນັກຮຽນ ຫຼື ພວກກ່ຽວສາມາດທີ່ຈະສ້າງແຜນທີ່ດ້ວຍຕົນເອງແລ້ວບອກໃຫ້ກຳນົດສະຖານທີ່ ທີ່ເຂົາຄິດວ່າມີຄວາມຮຸນແຮງເກີດຂຶ້ນ, ເມື່ອໃດ, ພາຍໃຕ້ເງື່ອນໄຂຫຍັງແດ່ ແລະ ແມ່ນໃຜ ໂດຍປົກກະຕິມັກຈະມີສ່ວນໄປກ່ຽວຂ້ອງ. ຈາກນັ້ນ, ທ່ານກໍສາມາດ

ວິເຄາະແຜນທີ່ເຫຼົ່ານີ້ ເພື່ອກຳນົດຖິ່ນບັນຫາບ່ອນທີ່ເກີດຄວາມຮຸນແຮງ ຫຼື ໜ້າຈະເກີດຄວາມຮຸນແຮງຂຶ້ນ.

ຄູຈຳນວນໜຶ່ງເຄີຍໄດ້ໃຊ້ແຜນທີ່ລັກສະນະດັ່ງກ່າວ ແລະ ຜົນຂອງການປະຕິບັດງານຂອງເຂົາໄດ້ສະເໜີແນະໄວ້ວ່າ ຄວາມຮຸນແຮງຈະເກີດຂຶ້ນຕາມເວລາ ແລະ ສະຖານທີ່ທີ່ຄາດເດົາໄວ້ພາຍໃນບໍລິເວນໂຮງຮຽນ[2],ບໍ່ເປັນການແປກປະຫຼາດຫຍັງເລີຍທີ່ເຫດການຄວາມຮຸນແຮງມັກເກີດຂຶ້ນໃນສະຖານທີ່ ທີ່ມີຄູຢູ່ໜ້ອຍ ຫຼື ບໍ່ມີຄູຢູ່ແຖວນັ້ນເລີຍ.

ນະໂຍບາຍ ແລະ ກິດຈະກຳແຊກແຊງທີ່ຄູເປັນຜູ້ລິເລີ້ມ ແລະ ໄດ້ຮັບການປະຕິບັດມີແນວໂນ້ມທີ່ຈະປະສົບຜົນສຳເລັດອັນຍິ່ງໃຫຍ່ ໃນການຫຼຸດຜ່ອນຄວາມຮຸນແຮງໃນໂຮງຮຽນ. ເຖິງຢ່າງໃດກໍຕາມ, ເດັກກໍຕ້ອງຖືກນຳເອົາເຂົ້າມີສ່ວນຮ່ວມເໝືອນກັນ. ການສົນທະນາກັບກຸ່ມຄວນຖືກນຳໄປສູ່ການສົນທະນາເຖິງບ່ອນໃດແດ່ທີ່ເປັນ“ ຈຸດຮ້ອນແຮງ”ເຊິ່ງຕັ້ງຢູ່ໃນເຂດໂຮງຮຽນ, ເປັນຫຍັງເດັກຈຳນວນໜຶ່ງ ຈຶ່ງໄວຕໍ່ຄວາມຮຸນແຮງ ແລະ ຈະສາມາດເຮັດຫຍັງໄດ້ແດ່ ເພື່ອຫຼຸດຜ່ອນຄວາມຮຸນແຮງໃນພື້ນທີ່ດັ່ງກ່າວແລະໃນໝູ່ນັກຮຽນເຫຼົ່ານີ້.

ການເພີ້ມທະວີການມີສ່ວນຮ່ວມຂອງສະມາຊິກຊຸມຊົນ ໃນການຍຸດຕິຄວາມຮຸນແຮງໃນໂຮງຮຽນຍັງສາມາດທີ່ຈະປັບປຸງສະພາບແວດລ້ອມຂອງຊຸມຊົນນຳອີກ. ນີ້ເປັນເລື່ອງສຳຄັນພິເສດໃນບ່ອນທີ່ຄວາມຮຸນແຮງເກີດຂຶ້ນນອກບໍລິເວນໂຮງຮຽນ ເຊັ່ນ ເວລາເດັກໄປໂຮງຮຽນ ຫຼື ກັບເມືອເຮືອນນີ້ຍຸດທະສາດການສ້າງແຜນທີ່ເຊິ່ງສາມາດໃຊ້ ເພື່ອສະແດງພື້ນທີ່ຄວາມຮຸນແຮງໃນຊຸມຊົນລວມທັງໃນໂຮງຮຽນດ້ວຍ.

ການເຝິກຫັດເພື່ອສ້າງແຜນທີ່ໂຮງຮຽນ-ຊຸມຊົນ ທີ່ໄດ້ນຳສະເໜີໃນເອກະສານເຫຼັ້ມກ່ອນສາມາດນຳໃຊ້ໄດ້ໃນເອກະສານເຫຼັ້ມນີ້ ເຊິ່ງເດັກໆຍັງສາມາດສະແດງໃຫ້ເຫັນທີ່ຕ່າງໆໃນຊຸມຊົນຂອງເຂົາວ່າມີບ່ອນໃດ ມັກເກີດຄວາມຮຸນແຮງຢູ່ເລື້ອຍໆ, ກ່ຽວຂ້ອງກັບຄວາມຮຸນແຮງຊະນິດໃດ, ຜູ້ໃດມັກຖືກເປັນເຫຍື່ອ ແລະ ເປັນຜູ້ທຳຮ້າຍຫຼາຍກວ່າໝູ່ທີ່ສຸດ, ການສ້າງແຜນທີ່ແບບນີ້ ເປັນບາດກ້າວທຳອິດທີ່ດີເລີດໃນການເຮັດວຽກກັບສະມາຊິກຊຸມຊົນ ເພື່ອກຳນົດວ່າດ້ວຍເຫດໃດພື້ນທີ່ບາງຈຸດຈຶ່ງມີແນວໂນ້ມ ທີ່ຈະເກີດຄວາມຮຸນແຮງທີ່ສຸດ, ເພື່ອສະເໜີວິທີແກ້ໄຂ ແລະ ເພື່ອດຳເນີນແຜນງານກິດຈະກຳແຊກແຊງ ຂອງຊຸມຊົນ - ໂຮງຮຽນທີ່ມີປະສິດທິຜົນ.

[2] Monitoring School Violence : Publications and Related Research Summaries. Global Program on Youth, University of Michigan, School of Social Work. This is an excellent Web site for resources on dealing with violence in the school. It can be found at http://gpy.ssw.umich.edu.

2 ສັນຍານເຕືອນສຳລັບເດັກທີ່ຖືກທາລຸນ

ບາງຄັ້ງເດັກຍິງ ແລະ ເດັກຊາຍ ຈະບໍ່ບອກໃຫ້ພວກເຮົາຮູ້ວ່າເຂົາເປັນເຫຍື່ອ ຂອງຄວາມຮຸນແຮງ ຫຼື ຢູ່ໃນພາວະວິກິດ. ເຂົາຈະສະແດງອອກໃຫ້ເຮົາເຫັນຫຼາຍກວ່າ. ເຖິງວ່າການປ່ຽນ ແປງໃນພຶດຕິກຳຂອງເດັກ ສາມາດຂຶ້ນຢູ່ກັບຫຼາກຫຼາຍເຫດຜົນກໍຕາມ, ບາງຄັ້ງມັນກໍເກີດຂຶ້ນ ຈາກ ຄວາມກົດດັນຂອງການທາລຸນທາງຮ່າງກາຍ ຫຼື ຄວາມຮູ້ສຶກທາງຈິດໃຈ. ຄູຜູ້ທີ່ຕື່ນຕົວຕໍ່ການປ່ຽນ ແປງເຫຼົ່ານີ້ ມັກຈະສາມາດເຂົ້າຊ່ວຍເຫຼືອສະຖານະການທີ່ມີການທາລຸນໄດ້. ຢູ່ຂ້າງລຸ່ມນີ້ ຈະເປັນ ບັນຊີລາຍການຂອງຄຸນລັກສະນະພາຍນອກເຊິ່ງເດັກທີ່ຖືກທາລຸນອາດສະແດງອອກມາ[3].ເຖິງຢ່າງ ໃດກໍຕາມ, ໃຫ້ຄິດຄຳນຶງໄວ້ໃນໃຈວ່າຮ່ອງຮອຍ ຫຼື ເຈື່ອນໆຳບາງຢ່າງອາດເປັນພຶດຕິກຳປົກ ກະຕິຂອງເດັກຄົນໃດໜຶ່ງໃນເວລາໃດໜຶ່ງ. ດັ່ງນັ້ນ, ຈຶ່ງມີຄວາມສຳຄັນໃນການເອົາໃຈໃສ່ເບິ່ງ ແບບແຜນພຶດຕິກຳປົກກະຕິຂອງເດັກ ແລະ ຕ້ອງຮັບຮູ້ດີພຶດຕິກຳໃໝ່ທີ່ເກີດຂຶ້ນ, ພຶດຕິກຳຮຸນ ແຮງສຸດຂີດ, ຫຼື ແບບມີການປະສົມປະສານກັນຂອງຄຸນລັກສະນະຕ່າງໆ ທີ່ກຳລັງຈະສະເໜີ ຕໍ່ໄປຂ້າງລຸ່ມ. ຖ້າສັນຍານເຕືອນເຫຼົ່ານີ້ເຫັນໄດ້ເດັ່ນຊັດ, ເດັກຄວນຖືກນຳສິ່ງໄປຮັບການແນະ ແນວທັນທີ ຫຼື ມີມາດຕະການທີ່ເໝາະສົມ (ເຊັ່ນ:ການໄດ້ຮັບການບໍລິການດ້ານສະຫວັດດີການ ສັງຄົມ).

ເດັກທີ່ຖືກທາລຸນດ້ານຄວາມຮູ້ສຶກທາງຈິດໃຈ, ທາງຮ່າງກາຍ ມັກຈະສະແດງອອກ ດັ່ງນີ້:

- ຫວາດກົວທີ່ຈະພົວພັນກັບຜູ້ອື່ນ ຫຼື ເປັນຄົນໂອນອ່ອນຕາມຄຳສັ່ງຈົນເກີນໄປ
- ຖອນຕົວ, ກ້າວລ້າວ ຫຼື ຫ້າວຫັນຜິດປົກກະຕິ (ຢູ່ນິ້ງບໍ່ເປັນ) (hyperactive), ຫງຸດຫງິດ ຫຼື ເສີຍເມີຍຕະຫຼອດ, ແຍກຕົວອອກຫ່າງ
- ບໍ່ສະແດງຄວາມມັກຄວາມຊອບ ຫຼື ສະແດງຄວາມມັກຄວາມຊອບເກີນ ປົກກະຕິ (ເຮັດ ໃຫ້ ເຂົ້າໃຈຜິດ ເມື່ອຖືກຍຸໂຍງໃຫ້ຫຼິ້ງໄຟ)

ອາການທາງຮ່າງກາຍ

- ຟົກຊ້ຳ, ຮອຍລອກໃໝ້, ຮອຍແຜແປ້ວ, ຮອຍຖືກຂ້ຽນຕີ, ກະດູກຫັກ, ບາດເຈັບຕໍ່ເນື່ອງ ຫຼື ບໍ່ສາມາດອະທິບາຍໃຫ້ເຂົ້າໃຈໄດ້
- ເປັນພະຍາດຕິດຕໍ່ທາງເພດສຳພັນ

[3] ທີ່ມາ: National Center for Assault Prevention (NCAP). Education, Information and Resource Center, Sewell, New Jersey, 2000. http:www.ncap.org/identity. htm. NCAP also has as international division with some materials translated in Spanish, French, Vietnamese, Cantonese, Romanian, Russian, and Japanese, Learn more about this at: http://ncap.org/cap_international.htm.

- ເປັນຮອຍໄຄ່ບວມທີ່ອະໄວຍະວະເພດ ຫຼື ຮູກົ້ນ, ມີເລືອດໄຫຼ ຫຼື ຄັນ

ຮ່ອງຮອຍເງື່ອນງຳທາງກິດຈະກຳ ແລະ ຄວາມເຄັ່ຽຊຶມຈົນເປັນນິໄສ

- ຝັນຮ້າຍ
- ຢ້ານກົວທີ່ຈະກັບເມືອເຮືອນ ຫຼື ໄປບາງສະຖານທີ່
- ຢ້ານກົວທີ່ຈະຢູ່ກັບບາງຄົນ
- ແລ່ນໜີ
- ຫຼີກລ້ຽງການປະຕິບັດໜ້າທີ່ (ມີພຶດຕິກຳຜິດໆທີ່ຄົນບໍ່ຍອມຮັບ)
- ຂີ້ຕົວະ

ພຶດຕິກຳບໍ່ເໝາະສົມກັບສ່ຳອາຍຸ

- ດູດຫົວໂປ້ມື
- ຮູ້ດີ ຫຼື ມີກິດຈະກຳທາງເພດສຳພັນ ລວມທັ້ງ ການສຳສ່ອນທາງເພດ
- ຍ່ຽວໃສ່ບ່ອນ
- ເສບສິ່ງມຶນເມົາ ຫຼື ສິ່ງເສບຕິດອື່ນໆ
- ການທຳຮ້າຍເດັກທີ່ອ່ອນກວ່າ
- ເອົາວຸງກທີ່ຜູ້ໃຫຍ່ຮັບຜິດຊອບໄປເຮັດ

ບັນຫາກ່ຽວຂ້ອງກັບການສຶກສາ

- ມີຄວາມຢາກຮູ້ຢາກເຫັນ, ມີຈິນຕະນາການສູງເກີນໄປ
- ຫຼົ້ມເຫຼວທາງການສຶກສາ ຫຼື ວິຊາການ
- ນອນຫຼັບໃນຫ້ອງ
- ບໍ່ສາມາດທຳສະມາທິໄດ້**ຕົວ**

ຊີ້ບອກດ້ານຄວາມຮູ້ສຶກທາງຈິດໃຈ

- ມີຄວາມເສົ້າໃຈ
- ຫວາດກົວ, ຢ້ານຄວາມມືດ, ຢ້ານຫ້ອງນ້ຳສາທາລະນະ ແລະ ອື່ນໆ
- ເຈັບປ່ວຍຊຳເຮື້ອ
- ບາດເຈັບຍ້ອນທຳລາຍຕົວເອງ
- ເຮັດໃຫ້ສັດບາດເຈັບ ຫຼື ຂ້າສັດ

- ♦ ມີຄວາມຢ້ານກົວເກີນເຫດ
- ♦ ຂາດຄວາມຄ່ອງແຄ້ວ ແລະ ຂາດທັກສະຄິດປະດິດສ້າງ

3 ສັນຍານເຕືອນສຳລັບເດັກທີ່ມີຄວາມສ່ຽງ

ເດັກຄົນອື່ນໆອາດຕົກຢູ່ໃນພາວະວິກິດໃນຄອບຄົວ, ຊຸມຊົນ ຫຼື ໂຮງຮຽນ. ໃນຂະນະທີ່ບໍ່ຖືກຫາລຸນໂດຍກົງ ພວກເຂົາອາດມີຄວາມຕ້ອງການ ການປົກປ້ອງພິເສດຈາກການພົວພັນລະຫວ່າງບຸກຄົນທີ່ມີການກົດດັນ ຫຼື ການໃຊ້ສິ່ງເສບຕິດ. ສະພາວະຮອບຕົວ ແລະ ພຶດຕິກຳທີ່ເປີດເຜີຍຂອງເຂົາສາມາດທີ່ຈະຊ່ວຍ ທ່ານກຳນົດເດັກເຫຼົ່ານີ້ໄດ້. ຍິ່ງໄປກວ່ານັ້ນ ການໃຊ້ເຄື່ອງມືອື່ນໆ ກໍອາດມີຄຸນຄ່າເໝືອນກັນ ເຊັ່ນ: ຊີວະປະຫວັດຂອງເດັກທີ່ນຳສະໜີໄວ້ກ່ອນໜ້າຈະໃຫ້ຂໍ້ມູນແກ່ທ່ານ ກ່ຽວກັບນັກຮຽນ ແລະ ສະພາບຄອບຄົວຂອງເຂົາ ລວມທັງບັນທຶກກ່ຽວກັບການສັງເກດພຶດຕິກຳຂອງນັກຮຽນ. ຢູ່ຂ້າງລຸ່ມນີ້ຈະເປັນຄຸນລັກສະນະບາງຢ່າງຂອງເດັກ ທີ່ຢູ່ໃນຄວາມ

ສ່ຽງ ແລະ ເຮົາຈະສາມາດເຮັດສິ່ງໃດແດ່ເພື່ອຊ່ວຍເຂົາ.[4]

ວິທີກຳນົດ/ລະບຸ ແລະ ຊ່ວຍເຫຼືອເດັກທີ່ມີຄວາມສ່ຽງ

ເດັກ ນັກຮຽນອາດຢູ່ໃນພາວະສ່ຽງ ຖ້າມີການປະສົມປະສານຂອງບັນດາປັດໄຈດັ່ງລຸ່ມນີ້ເກີດຂຶ້ນ:

- ♦ ຄອບຄົວບໍ່ປະພຶດປະຕິບັດໜ້າທີ່ປົກກະຕິ
- ♦ ພໍ່ແມ່ ຜູ້ປົກຄອງເສບສານເສບຕິດ ຫຼື ທໍລະມານຍ້ອນການປ່ວຍທາງຈິດ
- ♦ ມີພຶດຕິກຳທີ່ບໍ່ເໝາະສົມ ຫຼືກ້າວລ້ຳໃນຫ້ອງຮຽນ
- ♦ ມີຄວາມຫຼົ້ມເຫຼວ ຫຼື ຂາດຄວາມຕັ້ງໃຈໄປໂຮງຮຽນ
- ♦ ມີທັກສະທາງດ້ານສັງຄົມຈຳກັດ
- ♦ ມີໝູ່ເພື່ອນທີ່ໃຊ້ສິ່ງມຶນເມົາຫຼືສິ່ງເສບຕິດຫຼືເຂົ້າຮ່ວມໃນພຶດຕິກຳທີ່ມີຄວາມສ່ຽງອື່ນໆອີກ
- ♦ ຖານະທາງເສຖະກິດ-ສັງຄົມຕ່ຳ
- ♦ ທົດລອງໃຊ້ສານເສບຕິດແຕ່ຍັງເຍົາໄວ
- ♦ ມີທັດສະນະຄະຕິທີ່ຢາກໃຊ້ຢາເສບຕິດ, ສິ່ງມຶນເມົາ ຫຼື ຢາສູບ

ສັນຍານຫຼືອາການ ດັ່ງຕໍ່ໄປນີ້ອາດຊີ້ບອກວ່າມີການຫຍຸ້ງກ່ຽວກັບສານເສບຕິດ:

- ♦ ມີການປ່ຽນແປງບຸຄະລິກພາບຢ່າງເຫັນໄດ້ຊັດເຈນ, ອາລົມຜັນຜວນ

[4] ທີ່ມາ : Education Queensland. Identifying At Risk Students. http://education.qld.gov.au/health_safty/promotion /drug_education/html/m_risk.html

- ມີການປ່ຽນແປງດ້ານຮ່າງກາຍ ເຊັ່ນ : ນ້ຳໜັກລົດ ຫຼື ເພີ້ມ, ການເວົ້າບໍ່ແຈ້ງ, ການຍ່າງ ໂຊເຊ, ປະຕິກິລິຍາຕອບໂຕ້ເຊື່ອຊ້າ, ຍິ່ງຜະຫຍອງ, ເຫື່ອຕົກ, ເວົ້າຫຼາຍເກີນໄປ, ມີອາການ ເຄັບເຄີ້ມ (ດີໃຈເກີນເຫດ), ຄື່ນໄສ້ ແລະ ຮາກ.
- ມີການປ່ຽນແປງໄປໃນຜົນການຮຽນ
- ລະມັດລະວັງໃນການຕິດຕໍ່ພົວພັນກັບຄົນອື່ນທາງໂທລະສັບ ຫຼື ລະວັງໃນການນັດພົບ.
- ມີຄວາມຈຳເປັນທີ່ກົດດັນດ້ານການເງິນ

ປັດໄຈບວກເຫຼົ່ານີ້ອາດຈະຊ່ວຍຫຼຸດຜ່ອນຜົນກະທົບຂອງປັດໄຈສ່ຽງ:

- ຄວາມຜູກພັນໃກ້ຊິດທີ່ແຂງແຮງ, ການເຂົ້າກ່ຽວພັນຂອງຄອບຄົວກັບຊີວິດຂອງເດັກ
- ຜົນສຳເລັດໃນໂຮງຮຽນ
- ທັກສະດ້ານສັງຄົມດີ
- ການເຂົ້າມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງຊຸມຊົນ
- ການພົວພັນທີ່ເປັນການເບິ່ງແຍງດູແລໂດຍຢ່າງນ້ອຍຈາກຜູ້ໃຫຍ່ໜຶ່ງຄົນ ເຊັ່ນ - ຄູ

ໂຮງຮຽນອາດສາມາດຊ່ວຍເຫຼືອໂດຍການເຮັດບາງຢ່າງ ຫຼື ເຮັດທັງໝົດທຸກຢ່າງ ດັ່ງຕໍ່ໄປນີ້:

- ຊຸກຍູ້ການພົວພັນທີ່ໃຫ້ການສະໜັບສະໜູນ ແລະ ມີຄວາມປອດໄພ
- ຮັບປະກັນການມາເຂົ້າໂຮງຮຽນປົກກະຕິ ແລະ ໄດ້ຮຽນຢ່າງມີຄວາມໝາຍ
- ພັດທະນາທັກສະສ່ວນບຸກຄົນ ແລະ ທັກສະດ້ານສັງຄົມ
- ພັດທະນາທັກສະດ້ານວິຊາການ
- ກໍ່ສ້າງເຄືອຂ່າຍສັງຄົມທີ່ສະໜັບສະໜູນ
- ຊຸກຍູ້ການມີຄ່ານິຍົມທາງບວກ
- ສອນໃຫ້ເຂົ້າໃຈວິທີເຂົ້າເຖິງຂໍ້ມູນຄວາມຮູ້
- ສົ່ງຄວາມຮູ້ຄວາມເຂົ້າໃຈວິທີຖ່ວງເວລາເພື່ອທີ່ຈະບໍ່ເຂົ້າຫຍຸ້ງກ່ຽວກັບສານເສບຕິດ ຫຼື ພຶດຕິ ກຳສ່ຽງຕ່າງໆ
- ໃຫ້ຄວາມສະດວກເພື່ອເຂົ້າເຖິງການແນະແນວ

4. ແນວທາງເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ

ທ່ານສາມາດນຳໃຊ້ປະຕິບັດການຕ່າງໆດັ່ງຕໍ່ໄປນີ້ ເພື່ອຊ່ວຍການປ້ອງກັນຄວາມຮຸນແຮງ

ໃນໂຮງຮຽນຂອງທ່ານ. [5]

1. ວາງຂອບເຂດຈຳກັດທີ່ແນ່ນອນ, ໝັ້ນຄົງກ່ຽວກັບພຶດຕິກຳກ້າວລ້ຳ ແລະ ໃຊ້ກຳລັງຍັງ ຄັບຊູ່ເຂັ້ນ.
2. ສອນເດັກເຍົາໄວໃຫ້ມີສຸຂະພາບດີ ແລະ ແບບແຜນພຶດຕິກຳທີ່ບໍ່ໃຊ້ຄວາມຮຸນແຮງ.
3. ຮຽນຮູ້ ແລະ ນຳໃຊ້ແບບແຜນການນັບຖືລະບຽບວິໄນທີ່ມີປະສິດທິຜົນ, ບໍ່ໃຊ້ຄວາມຮຸນ ແຮງ ແລະ ເມື່ອເດັກປະພຶດປະຕິບັດຜິດພາດກໍຕັກເຕືອນ ແກ້ໄຂຢ່າງສະມ່ຳສະເໝີ.
4. ທ່ານເອງ ແລະ ຜູ້ອື່ນໆ ຕ້ອງເປັນແບບຢ່າງທີ່ດີມີປະສິດທິຜົນ ໃນການແກ້ບັນຫາໂດຍ ບໍ່ໃຊ້ຄວາມຮຸນແຮງ.
5. ປັບປຸງການສື່ສານກັບເດັກ (ເຊັ່ນ: ໃຫ້ເວລາແກ່ເດັກເພື່ອຮັບຟັງ).
6. ແນະນຳຊ່ອຍເຫຼືອການເຂົ້າມີສ່ວນຮ່ວມກັບສື່ຕ່າງໆ, ໂຮງຮຽນ, ກຸ່ມເພື່ອນດ້ວຍກັນ ແລະ ການຈັດຕັ້ງຂອງຊຸມຊົນ.
7. ຕັ້ງຄວາມຄາດຫວັງທີ່ເໝາະສົມສຳລັບເດັກທຸກຄົນ
8. ຊຸກຍູ້ ແລະ ຊົມເຊີຍເດັກເພື່ອຊ່ອຍເຫຼືອກັນ ແລະ ແກ້ບັນຫາໂດຍບໍ່ໃຊ້ຄວາມຮຸນແຮງ.
9. ກຳນົດ / ລະບຸບັນຫາກ່ຽວກັບສານສ້າງຄວາມມຶນເມົາ, ສານເສບຕິດ ແລະ ສານອັນ ຕະລາຍ ອື່ນໆ.
10. ສອນກົນໄກການຮັບມືກັບບັນຫາທີ່ເໝາະສົມເພື່ອແກ້ພາວະວິກິດຕ່າງໆ
11. ຂໍຄວາມຊ່ອຍເຫຼືອຈາກຜູ້ຊ່ຽວຊານມືອາຊີບ (ກ່ອນທີ່ຈະສາຍເກີນໄປ)
12. ຊີ້ນຳນຳພາຄວາມພະຍາຍາມຂອງຊຸມຊົນ ເພື່ອດຳເນີນການວິເຄາະຄວາມຮຸນແຮງໃນ ໂຮງຮຽນ ແລະ ຊຸມຊົນ(ເຊັ່ນ: ດຳເນີນການ ໂດຍຜ່ານການເຝິກເຮັດແຜນທີ່) ແລະ ເພື່ອ ພັດທະນາ, ປະສານງານ ແລະ ປະຕິບັດການໃຫ້ບໍລິການທີ່ສະໜັບສະໜູນໂຮງຮຽນ - ຊຸມຊົນຢ່າງມີປະ ສິດທິຜົນ.
13. ໃຫ້ໂອກາດເດັກໄດ້ເຝິກປະຕິບັດທັກສະຊີວິດ,ໂດຍສະເພາະ ວິທີແກ້ໄຂບັນຫາໂດຍບໍ່ໃຊ້ ຄວາມຮຸນແຮງ.

[5] ປັບມາຈາກ: World Health Organization (1998) WHO Information Series on School Health, Document Three- Violence Prevention: An important Element of a Health-Promoting School. Geneva.

ບົດທີ 6

ການດຳເນີນການແກ້ໄຂນັກຮຽນຝ່າຝືນລະບຽບວິໄນ

1. ການປັບປຸງຄວາມມີປະສິດທິຜົນຂອງເຕັກນິກການປະຕິບັດລະບຽບວິໄນ ແບບສ້າງສັນ

ຖ້າຫາກນັກຮຽນປະພຶດບໍ່ເໝາະສົມ, ເຕັກນິກໃນທາງບວກເພື່ອຫລຸດຜ່ອນ ຫຼື ລົບລ້າງ ພຶດຕິກຳດັ່ງກ່າວນັ້ນແມ່ນມີຄວາມຈຳເປັນ. ຄືດັ່ງພວກເຮົາໄດ້ຮຽນຮູ້ມາແລ້ວ, ການປະພຶດທີ່ບໍ່ເໝາະສົມ ເປັນການປະພຶດທີ່ບໍ່ເພິ່ງປາຖະໜາ ເຊິ່ງເຮັດໃຫ້ເດັກນັກຮຽນ ຫຼື ຜູ້ອື່ນໆຕົກຢູ່ໃນອັນຕະລາຍ, ບໍ່ເປັນໄປຕາມຄວາມຄາດຫວັງຂອງພວກເຮົາ ຫຼື ກົດລະບຽບຂອງຫ້ອງຮຽນ ແລະ ລົບກວນການປະພຶດທາງສັງຄົມທີ່ດີ ແລະ ການປະຕິບັດວິໄນໃນຕົນເອງ.ຢູ່ໃນພາກນີ້, ພວກເຮົາຈະເວົ້າກ່ຽວກັບເຕັກນິກສະເພາະທີ່ສາມາດນຳໃຊ້ເພື່ອຫຼຸດຜ່ອນການປະພຶດທີ່ບໍ່ເໝາະສົມ ແລະ ການປ້ອງກັນການປະພຶດນັ້ນ. ເຕັກນິກອັນໃດກໍຕາມທີ່ຖືກຄັດເລືອກເອົາມາໃຊ້ນັ້ນ, ຄວາມມີປະສິດທິຜົນຂອງມັນສາມາດທີ່ຈະເພີ້ມຂຶ້ນເລື້ອຍໆ

- ❖ ເມື່ອທ່ານ ແລະ ນັກຮຽນເຂົ້າໃຈແຈ້ງວ່າອັນໃດເປັນພຶດຕິກຳທີ່ມີບັນຫາ ແລະ ຜົນຕາມມາທີ່ ຄາດໄວ້ຂອງມັນແມ່ນຫຍັງ ເມື່ອມີພຶດຕິກຳແບບນີ້ເກີດຂຶ້ນ.
- ❖ ເມື່ອທ່ານຕອບໂຕ້ດ້ວຍການຊີ້ໃຫ້ເຫັນຜົນທີ່ໄດ້ຮັບ ໃນເບື້ອງຕົ້ນຢ່າງແຂງແຮງຈິງຈັງ ໃນທັນທີທັນໃດ ໃນເວລາການປະພຶດແບບບໍ່ເພິ່ງປາຖະໜາ ເກີດຂຶ້ນໃນຄັ້ງທຳອິດ (ເຊັ່ນ: ຖ້າຫາກກົດລະບຽບຖືກຝ່າຝືນທຳລາຍ, ໃຫ້ໃຊ້ຂໍ້ບັງຄັບແຕ່ດຽວນີ້ໂລດ, ບໍ່ໃຫ້ລໍຖ້າ).
- ❖ ເມື່ອທ່ານຊີ້ໃຫ້ຜົນທີ່ຕາມມາ ແບບເໝາະສົມຢ່າງສະເໝີຕົ້ນສະເໝີປາຍທຸກໆຄັ້ງ ຕໍ່ການປະພຶດທີ່ເປັນບັນຫາເປົ້າໝາຍເກີດຂຶ້ນ.
- ❖ ເມື່ອທ່ານໃຫ້ຄຳແນະນຳ ແລະ ການກວດແກ້ແບບໃຈເຢັນ ແລະ ດ້ວຍຄວາມເຫັນອົກເຫັນ ໃຈ;
- ❖ ເມື່ອທ່ານໃຫ້ເຫດຜົນຂອງຜົນໄດ້ຮັບທີ່ຕາມມາ ສຳລັບການປະພຶດສະເພາະໃດໜຶ່ງ ມັນຈະຊ່ອຍນັກຮຽນໃຫ້ຮຽນເອົາການປະພຶດທີ່ເໝາະສົມ ແລະ ປັບປຸງຄວາມເຊື່ອຟັງ ຫຼື ການຮູ້ຄວາມຂອງເຂົາເຈົ້າຕາມການຂໍຮ້ອງຈາກຜູ້ໃຫຍ່.

2. ຂໍ້ແນະນຳພິເສດກ່ຽວກັບການປະຕິບັດລະບຽບວິໄນແບບສ້າງສັນ

ຕາມຄວາມເປັນຈິງແລ້ວ, ຄວາມຈຳເປັນສຳລັບການໃສ່ວິໄນ ແມ່ນບໍ່ມີຄວາມຈຳເປັນທີ່ຈະຕ້ອງຍົກຂຶ້ນມາເວົ້າ. ສ່ວນໃຫຍ່ຂອງການປະຕິບັດວິໄນທີ່ດີ ແມ່ນການຫຼີກລ້ຽງສະພາບການທີ່ມີບັນຫາ ຫຼື ຈັດການກັບສະພາບການນັ້ນກ່ອນ ມັນຈະອອກນອກກອບການຄວບຄຸມ. ພວກເຮົາຈະເຮັດແນວໃດ? ຢູ່ໃນນີ້ມີຂໍ້ແນະນຳພິເສດທີ່ມີຄຸນຄ່າຢູ່10ຢ່າງ. ຂໍ້ແນະນຳຈຳນວນໜຶ່ງເປັນຂໍ້

ແນະນຳໃໝ່. ສ່ວນອີກຈຳນວນໜຶ່ງໄດ້ກ່າວແນະນຳກ່ອນນີ້. ໃຫ້ພວກເຮົາມາເບິ່ງຂໍ້ແນະນຳເຫຼົ່ານີ້ລະອຽດຕື່ມອີກ,.

1) ໃຫ້ແນ່ໃຈໃນຕົວທ່ານເອງ;ຢ່າເຮັດການເອີ້ນຜິດ (ຕີຄວາມໝາຍຂອງພຶດຕິກຳທີ່ນັກຮຽນສະແດງອອກຜິດ). ຄືດັ່ງໄດ້ສົນທະນາຢູ່ຂ້າງເທິງນັ້ນ, ການປະພຶດ ຫຼືພຶດຕິກຳທີ່ບໍ່ເໝາະສົມອັນແທ້ຈິງ ເກີດຂຶ້ນ ເມື່ອເວລານັກຮຽນເລືອກປະພຶດຢ່າງບໍ່ເໝາະສົມ. ກ່ອນທ່ານຈະກະທຳສິ່ງໃດໜຶ່ງ ເພື່ອຕອບໂຕ້ໃຫ້ຖາມ ຕົວທ່ານເອງດ້ວຍຄຳຖາມຕໍ່ໄປນີ້ກ່ອນ:

ກ. ນັກຮຽນໄດ້ເຮັດສິ່ງໃດໜຶ່ງຜິດແທ້ບໍ່? ມັນມີບັນຫາແທ້ບໍ່ໃນທີ່ນີ້ ຫຼື ພຽງຍ້ອນວ່າ ທ່ານມີຄວາມອິດເມື່ອຍ ແລະ ບໍ່ມີຄວາມອົດທົນ?

- ຖ້າມັນບໍ່ມີບັນຫາທີ່ແທ້ຈິງ, ໃຫ້ລະຖິ້ມຄວາມຄຽດຄວາມເມື່ອຍຍາກ ນັ້ນໄປຈາກນັກຮຽນ ແລະ ຫ້ອງຮຽນສາ.
- ຖ້າຫາກມີບັນຫາ, ໃຫ້ໄປທີ່ຄຳຖາມຕໍ່ໄປ.

ຂ. ໃຫ້ຄິດຈັກໜ້ອຍໜຶ່ງກ່ອນ. ນັກຮຽນຂອງທ່ານສາມາດເຮັດສິ່ງທີ່ທ່ານຄາດຫວັງໄວ້ແທ້ບໍ່ໃນທີ່ນີ້?

- ຖ້າຫາກທ່ານບໍ່ມີຄວາມເປັນທຳ, ໃຫ້ປະເມີນຄວາມຄາດຫວັງຂອງທ່ານຄືນໃໝ່.
- ຖ້າຫາກຄວາມຄາດຫວັງຂອງທ່ານມີຄວາມເປັນທຳ, ໃຫ້ໄປຫາຄຳຖາມຕໍ່ໄປ.

ຄ. ໃນເວລານັ້ນ ນັກຮຽນຂອງທ່ານໄດ້ຮູ້ບໍ່ວ່າເຂົາເຈົ້າເຮັດອັນໃດອັນໜຶ່ງຜິດ?

- ຖ້ານັກຮຽນຂອງທ່ານບໍ່ຮູ້ຈັກວ່າຕົນເອງໄດ້ເຮັດອັນໃດອັນໜຶ່ງຜິດ, ກໍຊ່ວຍໃຫ້ລາວເຂົ້າໃຈສິ່ງທີ່ທ່ານຄາດຫວັງຢາກໃຫ້ລາວເຮັດ, ໃຫ້ເຫດຜົນວ່າຍ້ອນຫຍັງ ແລະ ບອກວິທີປະຕິບັດວ່າເຮັດແນວໃດຈຶ່ງຖືກຕ້ອງ. ທ່ານຈຶ່ງຊ່ວຍເຫຼືອລາວ.
- ຖ້າຫາກນັກຮຽນຂອງທ່ານ ຮູ້ວ່າສິ່ງທີ່ເຂົາກະທຳນັ້ນຜິດ, ແລະ ເຂົາເຈົ້າເຈດຕະນາເມີນເສີຍຕໍ່ຄວາມຄາດຫວັງທີ່ມີເຫດຜົນນັ້ນ, ໝາຍວ່ານັກຮຽນຂອງທ່ານປະພຶດຜິດ.

ຖ້າຫາກການປະພຶດມີລັກສະນະເປັນອຸປະຕິເຫດ, ຈະບໍ່ຖືວ່າເປັນການປະພຶດທີ່ບໍ່ເໝາະສົມ ຖ້າຫາກການປະພຶດບໍ່ແມ່ນແບບອຸປະຕິເຫດ, ໃຫ້ຂໍຮ້ອງນັກຮຽນບອກເຫດຜົນວ່າເປັນຫຍັງເຂົາຈຶ່ງເຮັດສິ່ງນັ້ນໃຫ້ທ່ານຟັງ. ທ່ານຕ້ອງຮັບເຂົາຟັງຢ່າງລະອຽດຖີ່ຖ້ວນ ແລ້ວໃຫ້ປະເມີນເບິ່ງກ່ອນທີ່ທ່ານຈະຕອບໂຕ້.

2) ຊີ້ໃຫ້ເຫັນການກະທຳທີ່ເປັນທາງບວກ. ເວລາໃດກໍຕາມເມື່ອນັກຮຽນເຮັດສິ່ງໃດໜຶ່ງ ທີ່ເປັນປະໂຫຍດ, ມີຄວາມເອົາໃຈໃສ່, ມີການຮ່ວມມື ຫຼື ສະແດງອອກເຖິງການປັບປຸງ ຫຼື ກ້າວໜ້າຂຶ້ນ ທ່ານຈຶ່ງເຮັດໃຫ້ເຂົາວ່າ ທ່ານໄດ້ເອົາໃຈໃສ່ສັງເກດ ແລະ ຍ້ອງຍໍຊົມເຊີຍດ້ວຍຄຳເວົ້າດີໆ, ຕົວຢ່າງ “ສົມສັກ ຄູຖືກໃຈຫຼາຍກັບວິທີແກ້ໂຈດບັນຫາວຸ່ນວ້ຍຂອງນ້ອງ ”.

ເຖິງແມ່ນວ່າມັນຈະເປັນເຫດການທຳມະດາໆກໍຕາມ, ຢ່າຊອກຫາແຕ່ຄວາມຜິດພາດ, ຈົ່ງຊອກໃຫ້ເຫັນວ່າອັນໃດຖືກ/ໃຊ້ໄດ້ ແລະ ອັນໃດບໍ່ຖືກ/ໃຊ້ການບໍ່ໄດ້. ດັ່ງຕົວຢ່າງ "ນາດ, ເປັນສິ່ງປະເສີດແລ້ວ ທີ່ນ້ອງເຄີຍຕໍ່ສູ້ ຊ່ວຍເຫຼືອໝູ່ເພື່ອນ. ການເປັນໝູ່ເພື່ອນທີ່ຈົງຮັກພັກດີເປັນສິ່ງທີ່ສຳຄັນ. ເຖິງຢ່າງໃດກໍດີ, ຄູຈະບໍ່ອະນຸຍາດໃຫ້ນ້ອງຕີຄົນອື່ນ. ນ້ອງສາມາດໃຊ້ວິທີການອື່ນຈັດການແກ້ໄຂສະຖານະການໄດ້ບໍ່?"

3.) ປະຕິສຳພັນກັບນັກຮຽນດ້ວຍຄວາມເຄົາລົບນັບຖື. ໃຫ້ປະຕິບັດຕົນຕໍ່ນັກຮຽນ ຄືກັນກັບ ທ່ານຢາກໃຫ້ນັກຮຽນປະຕິບັດຕົນຕໍ່ກັບທ່ານ. ຊ່ວຍເຂົາເຈົ້າໃຫ້ປະຕິບັດດີຂຶ້ນ. ໃຫ້ເປັນຜູ້ແນະນຳຊີ້ທິດທາງບໍ່ແມ່ນເປັນນາຍ. ໃຫ້ເປັນຄູສອນປະເພດທີ່ທ່ານເຄີຍຈົດຈຳດ້ວຍຄວາມຮັກຄວາມຊອບໃນວັນເວລາທີ່ທ່ານເຄີຍເປັນນັກຮຽນ.

4.) ໃຫ້ສື່ສານ/ບອກຄວາມຄາດຫວັງຂອງທ່ານ ຕໍ່ນັກຮຽນຂອງທ່ານໄດ້ຮັບຊາບຢ່າງຈະແຈ້ງ ແລະດ້ວຍຄວາມນັບຖື.ໃຫ້ບອກເຕືອນນັກຮຽນໃຫ້ຮູ້ໄວ້ສະເໝີກ່ຽວກັບຄວາມຄາດຫວັງຂອງທ່ານ, ກ່ອນສະຖານະ ການ ແລະໃນເວລາກຳລັງດຳເນີນໃນສະຖານະການ. ຕົວຢ່າງ ໃນຕອນເລີ່ມຕົ້ນສົກຮຽນໃຫ້ບອກນັກຮຽນຂອງທ່ານວ່າ: "ເມື່ອໝົດຊົ່ວໂມງສອນໃນມື້ນີ້ ຫຼື ໃນທຸກໆມື້, ຄູຕ້ອງການໃຫ້ພວກນ້ອງນັ່ງ ຢູ່ກັບບ່ອນ ຈົນກວ່າອ້າຍເອີ້ນຊື່ພວກນ້ອງ. ການເຮັດວິທີນີ້ ທຸກຄົນຈະສາມາດອອກຫ້ອງໄປດ້ວຍຄວາມປອດໄພ ໂດຍບໍ່ມີການຕຳກັນ ແລະ ຈະເຮັດໃຫ້ຄູສາມາດຮຽນຮູ້ຊື່ ແລະຈື່ໜ້າຂອງພວກນ້ອງໄດ້ໄວຂຶ້ນ "ໃຫ້ທ່ານບອກເຕືອນນັກຮຽນຂອງທ່ານທຸກໆມື້ ຈົນກວ່າການອອກຫ້ອງໄປຢ່າງເປັນລະບຽບ ກາຍເປັນພາກສ່ວນໜຶ່ງໄປແບບທຳມະຊາດຂອງກິດຈະວັດປະຈຳວັນຂອງຫ້ອງຮຽນຂອງທ່ານ.

5.) ໃຫ້ນຳໃຊ້ອາລົມຂັນ ຫຼື ການຜ່ອນຄາຍອາລົມ ບໍ່ແມ່ນການປະພຶດທີ່ບໍ່ເໝາະສົມທຸກໆຢ່າງທີ່ນັກຮຽນເຮັດນັ້ນ ຈຳເປັນຕ້ອງໃສ່ວິໄນ. ເດັກກໍຄືຜູ້ໃຫຍ່ກໍມີຄວາມອິດເມື່ອຍ, ໝົດກຳລັງ, ລຳຄານ ຫຼືເບື່ອໜ່າຍ. ການໃສ່ວິໄນອາດຈະບໍ່ແກ້ໄຂອັນໃດໄດ້ໃນສະຖານະການແບບນີ້. ໃຫ້ພະຍາຍາມນຳໃຊ້ອາລົມຂັນໃນຊົ່ວໂມງສອນຂອງທ່ານ ເພື່ອເຮັດໃຫ້ທຸກຄົນມີຄວາມສົນໃຈບໍ່ໃຫ້ເບື່ອໜ່າຍ, ຕົວຢ່າງ ໃນເວລາສອນວິຊາວິທະຍາສາດບອກໃຫ້ນັກຮຽນຂອງທ່ານແກ້ບັນຫາປິດສະໜາ ເພື່ອນຳເຂົ້າສູ່ບົດຮຽນ. ບັນຫາປິດສະໜາອາດສາມາດເປັນ "ແມ່ນຫຍັງທີ່ເລີ່ມຕົ້ນຊີວິດດ້ວຍສີ່, ດຳລົງຊີວິດດ້ວຍສອງ ແລະ ຢູ່ທ້າຍຊີວິດດ້ວຍສາມ?" ຄຳຕອບກໍຄືຄົນ. ເດັກຄານດ້ວຍສີ່ (ສອງຂາ ສອງແຂນ) ແລ້ວຮຽນຍ່າງດ້ວຍສອງຂາ ແລະ ເມື່ອເວລາເຖົ້າແກ່ມີຄົນຈຳນວນໜຶ່ງໃຊ້ໄມ້ຄ້ອນເທົ້າຍ່າງດ້ວຍ, ເຂົາເຈົ້າມີສາມຂາ! ປິດສະໜານີ້ອາດຈະເປັນວິທີທີ່ໜ້າສົນໃຈ ເພື່ອນຳເຂົ້າສູ່ຫົວຂໍ້ບົດຮຽນ ກ່ຽວກັບຮ່າງກາຍຂອງຄົນພັດທະນາການຢ່າງໃດ ຫຼື ນຳເຂົ້າສູ່ການສົນທະນາກ່ຽວກັບໄວອາຍຸ. ສຳລັບນັກຮຽນໂຮງຮຽນອະນຸບານ, ໃຫ້ນຳໃຊ້ການຜ່ອນຄາຍອາລົມເຊັ່ນ: "ເຊີນ

ພວກຫຼານເບິ່ງແມງກະເບື້ອ!" ສາມາດເຮັດປີກໜີຈາກການສະອື້ນຄວນຄາງ, ແກ່ວງແຂນຂາ ແລະຄວາມໂຫໂສ ແລະ ສາມາດນຳໄປສູ່ກິດຈະກຳການພັດທະນາອັນດີ, ເຊັ່ນ ການບອກ ໃຫ້ເດັກແຕ້ມຮູບແມງກະເບື້ອ. ໃຫ້ນ້ອງໆນຳໃຊ້ຈິນຕະນາການຂອງຕົນ!.

6.) ໃຫ້ນຳໃຊ້ການຮ່ວມມືແບບຕັ້ງໜ້າ. ໃຫ້ຄຳແນະນຳທີ່ທ່ານຮູ້ວ່ານັກຮຽນຈະສະໜຸກສະໜານ ໃນການເຮັດຕາມ ກ່ອນທ່ານຈະໃຫ້ຄຳແນະນຳທີ່ເຂົາອາດຈະລັ່ງເລໃນການເຮັດ. ກ່ອນອື່ນເຮັດ ໃຫ້ເຂົາມີອາລົມການຮ່ວມມືເສຍກ່ອນ. ຕົວຢ່າງ, ເວົ້າວ່າ "ໃຫ້ທຸກຄົນ ຊຽນສະຫຼະ x̄ ຕົວໃຫຍ່ໆ ຢູ່ໃນອາກາດ" ເຮີຍ, ມາລີ ອັນນັ້ນດີຫຼາຍ "ທຸກຄົນຍົກນິ້ວຊີ້ຂຶ້ນ. ຕອນນີ້ໃຫ້ຈີ້ນິ້ວມືໃສ່ປຶ້ມ ບ່ອນທີ່ພວກນ້ອງຄິດວ່າເປັນໜ້າ 108". ແລ້ວໃຫ້ທ່ານບອກເຂົາເຈົ້າເປີດປຶ້ມໜ້າ 108 ແລ້ວ ໃຫ້ ຊຽນຄຳຕອບຂອງຄຳຖາມຫົກຂໍ້ທີ່ຢູ່ໃນໜ້ານັ້ນ.

7.) ໃຫ້ທາງເລືອກ ຫຼື ໂອກາດເລືອກທີ່ມີຂອບເຂດ ແລະ ຊຸກຍູ້ສິ່ງເສີມການຕັດສິນໃຈເປັນ ໝູ່ ຄະນະ.ນັກຮຽນສ່ວນຫຼາຍບໍ່ມັກໃຫ້ມີຄົນບອກເຮັດສິ່ງໃດໜຶ່ງ ຕະຫຼອດເວລາ; ການໃຫ້ໂອກາດ ເລືອກຈະຊ່ວຍໃຫ້ ເຂົາມີຄວາມຮູ້ສຶກເຖິງການຄວບຄຸມລະດັບໃດໜຶ່ງ ເຖິງແມ່ນວ່າມັນຈະບໍ່ຫຼາຍ ເກີນໄປກໍຕາມ. ເມື່ອເວລາການສອບເສັງມາຮອດ ທ່ານສາມາດເວົ້າວ່າ "ມື້ອັນອ້ຽງຄາມພວກເຮົາ ຈະມີການສອບເສັງຫັດອ່ານ, ຜູ້ໃດຕ້ອງການສອບເສັງພາກຊຽນ ແລະ ຜູ້ໃດຕ້ອງການສອບເສັງ ປາກເປົ່າ? ພວກນ້ອງສາມາດເລືອກເອົາອັນໃດກໍ່ໄດ້ ຕາມພວກນ້ອງຕ້ອງການ" .ອັນນີ້ຈະເປັນການ ໃຫ້ຄວາມຮູ້ສຶກຂອງການຄວບຄຸມສະຖານະການແກ່ນັກຮຽນຂອງທ່ານ. ຖ້າທ່ານຕ້ອງການຢາກ ເຮັດການກວດກາພຽງປະເພດດຽວ, ກໍບອກໃຫ້ເຂົາເຈົ້າສົນທະນາເຖິງຂໍ້ດີ(ໄດ້ປຽບ) ແລະ ຂໍ້ ອ່ອນ(ເສຍປຽບ) ຂອງການກວດກາທັງສອງແບບນັ້ນ ແລ້ວລົງຄະແນນສຽງວ່າ ອັນໃດທີ່ເຂົາ ເຈົ້າມັກຫຼາຍກວ່າ. ສຽງສ່ວນຫຼາຍຖືເປັນເປັນຝ່າຍຊະນະ. ຖ້າຫາກມີນັກຮຽນຈຳນວນໜຶ່ງເສຍໃຈ ຍ້ອນມີສຽງສະໜັບສະໜູນໃນຫ້ອງໜ້ອຍກວ່າ ເຊັ່ນ ເຂົາເຈົ້າຕ້ອງການ ເຮັດກວດກາແບບຊຽນ, ແຕ່ໃນຫ້ອງສ່ວນຫຼາຍເລືອກເອົາການກວດກາແບບປາກເປົ່າໃນວັນສອບເສັງ, ກໍຈົ່ງໃຫ້ຄຳຖາມ ເພີ້ມເຕີມທີ່ເປັນແບບຊຽນກໍໄດ້.

8.) ປ່ອຍໃຫ້ຜົນຂອງພຶດຕິກຳເກີດຂຶ້ນຕາມທຳມະຊາດ, ແຕ່ໃຫ້ເປັນຜົນທີ່ມີຄວາມປອດໄພ. ຖ້າ ຫາກ ນັກຮຽນຄົນໜຶ່ງມາຮອດຫ້ອງຮຽນຊ້າເລື້ອຍໆ, ຢ່າໄດ້ມີຄວາມເສຍໃຈ. ມັນແມ່ນຄວາມຮັບ ຜິດຊອບຂອງນັກຮຽນທີ່ຈະມາໂຮງຮຽນໃຫ້ທັນເວລາ. ໃຫ້ບອກລາວວ່າຖ້າຍັງສືບຕໍ່ມາໂຮງຮຽນຢູ່ ທ່ານຈະສົ່ງຈົດໝາຍໄປໃຫ້ຜູ້ປົກຄອງ. ຖ້າເຂົາຍັງສືບຕໍ່ມາຊ້າອີກ ໃຫ້ສົ່ງຈົດໝາຍໄປຍັງ ເຮືອນ ຫາພໍ່ແມ່ ແລ້ວປ່ອຍໃຫ້ລາວປະເຊີນກັບຜົນທີ່ຈະຕາມມາ. ລາວຈະໄດ້ຮຽນຮູ້ເຖິງຄວາມຮັບຜິດ ຊອບສຳລັບການປະພຶດ ແລະ ຜົນທີ່ຕາມມາຕາມພາຍຫຼັງ.

9.) ຢ່າເອົາການບໍ່ເຊື່ອຟັງຄູແບບຫົວດື້ຂອງນັກຮຽນມາເປັນເລື່ອງສ່ວນຕົວ. ເດັກຕ້ອງການຢາກສະແດງເຖິງຄວາມບໍ່ເຊື່ອຟັງ ແລະ ຕ້ອງການຢາກທົດສອບຂອບເຂດຈຳກັດ ເຊິ່ງເປັນພາກສ່ວນໜຶ່ງຂອງການພັດທະນາຂອງເຂົາເຈົ້າ. ຢ່າໄດ້ມີຄວາມຮູ້ສຶກວ່ານີ້ ມັນເປັນການລົບຫຼູ່ອຳນາດຂອງທ່ານ.ໃຫ້ໂຕ້ຕອບໃນແບບມິດງຽບ ໂດຍໃຫ້ນຳໃຊ້ການໃສ່ວິໄນທີ່ສົ່ງເສີມການຄວບຄຸມຕົນເອງ. ທ່ານຈື່ຈຳກໍລະນີ ທ້າວ ເຣມອນ ຢູ່ໃນຕອນເລີ່ມຕົ້ນຂອງພາກນີ້ຢູ່ບໍ? ໃນຕອນທຳອິດຄູສອນຂອງລາວເອົາການປະພຶດຂອງ ທ້າວ ເຣມອນ ມາເປັນເລື່ອງສ່ວນຕົວ ແລະ ໄດ້ເຮັດໃຫ້ນາງຄູຫົວເສຍທີ່ສຸດ. ແຕ່ເມື່ອເວລາ ສາວຄູຢຸດ ເຊົາເອົາເລື່ອງຂອງເຣມອນ ມາເປັນເລື່ອງສ່ວນຕົວ ແລະໄດ້ເຂົ້າໃຈວ່າເວລາໃດ ແລະ ຍ້ອນຫຍັງທ້າວ ເຣມອນ ຈຶ່ງປະພຶດບໍ່ເໝາະສົມ, ສາວຄູຈຶ່ງສາມາດສ້າງຍຸດທະສາດທີ່ມີປະສິດທິຜົນ ເພື່ອຈັດການກັບ ທ້າວ ເຣມອນ ແລະ ສຸດທ້າຍກໍ່ໄດ້ຮັບຜົນໃນທາງບວກ.

10.) ໃຫ້ຮູ້ຄວາມພະຍາຍາມ, ແຕ່ບໍ່ແມ່ນຈະຮູ້ຄວາມຖືກຕ້ອງ. ຖ້າຫາກນັກຮຽນເຮັດດີທີ່ສຸດກັບທ່ານ, ທ່ານຄວນດີໃຈ. ຄວາມພະຍາຍາມ ຫຼືການທົດລອງເປັນບາດກ້າວທຳອິດຂອງການຮຽນຮູ້. ຖ້າຫາກນັກຮຽນບໍ່ຕ້ອງການທີ່ຈະພະຍາຍາມເຮັດວຽກທີ່ຍາກ, ໃຫ້ເວົ້າກ່ຽວກັບເວລາທີ່ຄວາມພະຍາຍາມຂອງເຂົາໄດ້ນຳເອົາຄວາມສຳເລັດມາໃຫ້ເຂົາເຈົ້າ. ໃຫ້ຊຸກຍູ້ສົ່ງເສີມໃຫ້ເຫັນເຖິງຄວາມພະຍາຍາມອີກ. ຢ່າລືມບອກນັກຮຽນວ່າ ເມື່ອລາວພະຍາຍາມເຮັດວຽກຍາກເທົ່າທີ່ທົນໄດ້, ທ່ານຈະມີຄວາມຍິນດີເພິ່ງພໍໃຈ. ຈົ່ງໃຫ້ນັກຮຽນຮູ້ສຶກວ່າ ທ່ານມີຄວາມສັດທາໃນຄວາມອາດສາມາດຂອງເຂົາເຈົ້າ.

3. ຂໍ້ແນະນຳພິເສດກ່ຽວກັບການສິດສອນໃນຫ້ອງຮຽນແບບສ້າງສັນ

ການປະຕິບັດວິໄນ ໃນທາງບວກຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຈາກການສິດສອນແບບທາງບວກ. ມີວິທີການທີ່ເປັນທາງບວກອີກຫຼາຍໆຢ່າງ ທີ່ທ່ານສາມາດປ້ອງກັນການປະພຶດທີ່ບໍ່ເໝາະສົມ ເມື່ອເວລາທ່ານສິດສອນ ຫຼື ຢ່າງໜ້ອຍກໍ່ເພື່ອຈັດການກັບການປະພຶດນັ້ນຢ່າງມີປະສິດທິຜົນ ແລະ ບໍ່ທຳລາຍບັນຍາກາດຂອງຫ້ອງຮຽນຂອງທ່ານ. ໃນຂ້າງລຸ່ມນີ້ມີຂໍ້ແນະນຳ 6 ຢ່າງ. ນອກເໜືອຈາກນີ້ທ່ານສາມາດຄົ້ນຄິດອັນໃດອີກໄດ້ບໍ?

1.) ໃຫ້ມີຈຸດສຸມ ແລະເວົ້າຈາຢ່າງນິ້ມນວນ. ໃຫ້ມີຄວາມແນ່ໃຈວ່າທ່ານໄດ້ເອົາໃຈໃສ່ຕໍ່ທຸກໆຄົນຢູ່ໃນຫ້ອງຮຽນ ກ່ອນທ່ານຈະເລີ່ມຕົ້ນສອນບົດຮຽນຂອງທ່ານ. ໃຫ້ລໍຖ້າເພື່ອຈະເລີ່ມຕົ້ນສອນຈົນກວ່າທຸກຄົນໄດ້ມິດງຽບລົງ. ຄູສອນຜູ້ທີ່ມີປະສົບການຮູ້ຈັກວ່າ ຄວາມມິດງຽບໃນຕອນສອນບົດຮຽນແມ່ນພາກສ່ວນທີ່ມີປະສິດທິຜົນທີ່ສຸດ. ເຂົາເຈົ້າເນັ້ນໃສ່ການລໍຖ້າ ໂດຍຂະຫຍາຍມັນອອກໄປແຕ່ 3 ຫາ 5 ວິນາທີ ພາຍຫຼັງທີ່ຫ້ອງຮຽນໄດ້ມິດງຽບໄປແລ້ວ. ນັກຮຽນຈະສຳນຶກທັນໃດວ່າຫາກຄູສອນລໍຖ້າຄວາມຕັ້ງໃຈຂອງເຂົານານສ່ຳໃດ ເຂົາກໍຈະມີເວລາຫວ່າງໜ້ອຍ ໃນຕອນ

ທ້າຍຂອງຊົ່ວໂມງສອນ. ຫຼັງຈາກຊ່ວງລໍຖ້າແລ້ວ ໃຫ້ເລີ່ມຕົ້ນສອນບົດຮຽນໂດຍນຳໃຊ້ສຽງຄ່ອຍ ກວ່າສຽງທຳມະດາ. ຄູສອນຜູ້ທີ່ເວົ້າຈານີ້ມນວນຈະມີຫ້ອງຮຽນທີ່ສະຫງົບ ແລະ ມິດງຽບກວ່າຫ້ອງ ອື່ນທີ່ຄູໃຊ້ສຽງດັງແຮງ. ນັກຮຽນຂອງຄູຜູ້ນັ້ນຈະນັ່ງນິ້ງເພື່ອຈະໄດ້ຍິນສຽງຄູເວົ້າ.

2.) ໃຫ້ຄຳແນະນຳໂດຍກົງ. ຄວາມບໍ່ແນ່ນອນຈະເພີ່ມລະດັບຂອງຄວາມຕຶ່ນເຕັ້ນຢູ່ໃນຫ້ອງຮຽນ. ຄວນເລີ່ມຕົ້ນການສອນໃນແຕ່ລະຫ້ອງ ດ້ວຍການບອກນັກຮຽນຂອງທ່ານໂດຍກົງເລີຍວ່າ ຈະມີ ຫຍັງເກີດຂຶ້ນ.ໃຫ້ສະເໜີໂດຍສັງເຂບວ່າອັນໃດທີ່ທ່ານ ແລະ ນັກຮຽນຂອງທ່ານຈະເຮັດໃນຊ່ວງ ເວລານັ້ນ. ທ່ານສາມາດຕັ້ງກອບເວລາສຳລັບກິດຈະກຳບາງຢ່າງ. ທ່ານສາມາດປະສົມປະສານ ການໃຫ້ຄຳແນະນຳໂດຍກົງກັບ ການເນັ້ນເພື່ອລວມເອົາເວລາໃນຕອນທ້າຍຂອງຊ່ວງເວລາດັ່ງ ກ່າວ ສຳລັບນັກຮຽນ ເພື່ອທີ່ຈະເຮັດກິດຈະກຳຕາມທີ່ເຂົາເຈົ້າເລືອກເອົາ. ທ່ານອາດຈະສິ້ນສຸດ ການພັນລະນາກິດຈະກຳຂອງຫ້ອງຮຽນດ້ວຍການເວົ້າວ່າ “ຄູຄິດວ່າ ພວກເຮົາຈະມີເວລາຈຳນວນ ໜຶ່ງໃນຕອນທ້າຍຂອງກິດຈະກຳເພື່ອໃຫ້ພວກນ້ອງໄດ້ລົມກັບໝູ່ເພື່ອນ, ໄປຫ້ອງສະໝຸດ ຫຼື ເຮັດ ວຽກໃຫ້ທັນກັບຫ້ອງອື່ນໆ”.

3.) ການຊຸກຍູ້ຕິດຕາມ ແລະ ຊ່ວຍເຫຼືອ. ໃຫ້ຍ່າງວົນວຽນໄປມາ; ໃຫ້ລຸກຂຶ້ນແລ້ວຍ່າງອ້ອມຮອບ ໄປຕາມຫ້ອງຮຽນ, ໂດຍສະເພາະໃນເວລານັກຮຽນກຳລັງເຮັດບົດເຝິກຫັດພາກຮຽນ ຫຼື ເຮັດວຽກ ເປັນກຸ່ມ. ໃຫ້ກວດເບິ່ງຄວາມຄືບໜ້າຂອງການເຮັດວຽກຂອງເຂົາ. ຢ່າຂັດຈັງຫວะ ຫຼື ພະຍາຍາມ ປະກາດແບບທົ່ວໄປ ເວັ້ນເສຍແຕ່ວ່າ ທ່ານສັງເກດເຫັນວ່ານັກຮຽນຫຼາຍໆຄົນພົບບັນຫາຫຍຸ້ງຍາກ ແບບດຽວກັນ. ໃຫ້ໃຊ້ສຽງທີ່ຄ່ອຍໆ ແລະ ນັກຮຽນຈະຮູ້ສຶກຊາບຊຶ້ງຕໍ່ການເອົາໃຈໃສ່ແບບສ່ວນຕົວ ແລະ ໃນທາງທີ່ດີຂອງທ່ານ.

4.) ການໃຊ້ສັນຍານແບບບໍ່ເວົ້າຈາ. ຢູ່ໃນບາງຫ້ອງຮຽນ ຄູສອນມີກະດິງນ້ອຍຢູ່ເທິງໜ້າໂຕະຂອງ ເພິ່ນ. ເມື່ອຄູສັ່ນກະດິງເຖິງວ່າຈະສັ່ນຄ່ອຍໆ ແຕ່ກໍຈະເຮັດໃຫ້ທຸກໆຄົນຕັ້ງໃຈ. ຄູສອນບາງຄົນໄດ້ ສະແດງໃຫ້ເຫັນເຖິງວິທີການທີ່ສະຫຼາດຫຼາຍຢ່າງ ໃນຫຼາຍປີຜ່ານມາໃນການນຳໃຊ້ປະໂຫຍດຈາກ ສັນຍານແບບບໍ່ຕ້ອງເວົ້າຢູ່ໃນຫ້ອງຮຽນ.ຄູບາງຄົນຈະໃຊ້ວິທີເປີດ-ປິດສະວິດໄຟແບບໄວໆ, ບາງ ຄົນເອົາກະດິ່ງໄວ້ຢູ່ໃນຖົງໂສ້ງ, ບາງຄົນເຄາະກະດານດ້ວຍສໍຂາວ ຫຼື ສໍດຳ. ສັນຍານແບບບໍ່ ປາກເວົ້າ ຍັງສາມາດສະແດງອອກທາງໃບໜ້າ, ທ່າທາງຂອງຮ່າງກາຍ ແລະ ສັນຍານມື. ຄວນ ເອົາໃຈໃສ່ຄັດເລືອກປະເພດຂອງສັນຍານ-ທ່າທາງທີ່ທ່ານໃຊ້ຢູ່ໃນຫ້ອງຮຽນ. ຄວນໃຊ້ເວລາ ເພື່ອ ອະທິບາຍສິ່ງທີ່ທ່ານຕ້ອງການ ໃຫ້ນັກຮຽນເຮັດໃນເວລາທ່ານໃຊ້ສັນຍານ-ທ່າທາງ.

5.) ການແລກປ່ຽນ. ບໍ່ມີພຽງແຕ່ທ່ານເທົ່ານັ້ນ ທີ່ຕ້ອງການຢາກຮູ້ກ່ຽວກັບນັກຮຽນຂອງທ່ານເອງ ພວກເຂົາກໍຕ້ອງການຢາກຮູ້ກ່ຽວກັບຕົວທ່ານ ແລະ ຄວາມສົນໃຈຂອງທ່ານເຊັ່ນດຽວກັນ. ໃຫ້ບັນ

ຈຸເອົາບັນດາສິ່ງຂອງສ່ວນຕົວເຂົ້າໃນຫ້ອງຮຽນຂອງທ່ານ. ຮູບຄອບຄົວ ຫຼື ສິ່ງຕ່າງໆຂອງງານອະດິເລກ ຫຼື ຂອງສະສົມຕ່າງໆທີ່ຢູ່ເທິງໂຕະຂອງທ່ານນັ້ນຈະເປັນຕົ້ນເຫດ ໃຫ້ມີການສົນທະນາສ່ວນຕົວກັບນັກຮຽນ. ເມື່ອເຂົາເຈົ້າຮູ້ຈັກທ່ານດີຂຶ້ນ ທ່ານກໍຈະເຫັນເລີຍວ່າ ບັນຫາຂອງການໃສ່ວິໄນຈະໜ້ອຍລົງ.

6.) ການແຊກແຊງຄວາມເອົາໃຈໃສ່ຕ່ຳ. ຄູສອນທີ່ມີປະສິດທິພາບຈະດູແລເອົາໃຈໃສ່ເລື່ອງທີ່ວ່ານັກຮຽນຈະບໍ່ຖືກຍ້ອງຍໍ ສຳລັບການປະພຶດທີ່ບໍ່ເໝາະສົມ ເພື່ອໃຫ້ກາຍເປັນຈຸດສົນໃຈ. ຄູສອນດັ່ງກ່າວຈະຕິດຕາມກຳກັບກິດຈະກຳຢູ່ໃນຫ້ອງ ໂດຍການເຄື່ອນໄຫວໄປມາຮອບຫ້ອງຮຽນ ແລະ ຄາດຄະເນໄດ້ບັນຫາຕ່າງໆ ກ່ອນມັນຈະເກີດຂຶ້ນ. ວິທີການປະຕິບັດຕໍ່ນັກຮຽນຜູ້ປະພຶດບໍ່ເໝາະສົມນັ້ນ ແມ່ນເຮັດແບບງຽບໆບໍ່ໃຫ້ເປັນທີ່ສັງເກດເຫັນ. ນັກຮຽນຜູ້ອື່ນໆໃນຫ້ອງຮຽນຈະບໍ່ໄດ້ຖືກລົບກວນ. ຕົວຢ່າງ ຂະນະທີ່ພວມສອນບົດຮຽນໃນຫ້ອງ, ຄູສອນຈະໃຊ້ປະໂຫຍດຈາກວິທີການເອີ້ນຊື່ນັກຮຽນ. ຖ້າຫາກເຫັນນັກຮຽນເວົ້າລົມ ຫຼື ບໍ່ຕັ້ງໃຈມີສ່ວນຮ່ວມ, ຄູສອນກໍພຽງແຕ່ເວົ້າຊື່ນັກຮຽນຜູ້ທີ່ພວມລົມກັນຢູ່ແບບທຳມະຊາດໄປເລີຍ ເຊັ່ນ “ເຈົ້າເຫັນບໍ່, ທ້າວໄຈ, ພວກເຮົາເອົາອັນໜຶ່ງມາໃສ່ໃນຖັນທີສິບ ”ໃນເມື່ອ ທ້າວໄຈ ໄດ້ຍິນຊື່ຕົນເອງ ກໍຈະເຮັດໃຫ້ລາວກັບຄືນມາສູ່ກິດຈະກຳ ແລະ ນັກຮຽນຜູ້ອື່ນໆຈະບໍ່ສັງເກດເຫັນພິລຸດຫຍັງໝົດ.

4. ການນຳໃຊ້ຜົນຮັບທີ່ຕາມມາທີ່ເໝາະສົມ, ທັງທີ່ເປັນທາງບວກ ແລະ ທາງລົບ

ດ້ານທີ່ສຳຄັນຂອງການຮຽນຮູ້ ແມ່ນການໄດ້ປະສົບການຈາກຜົນໄດ້ຮັບທີ່ຕາມມາຂອງການກະທຳຂອງພວກເຮົາ. ຖ້າຜົນໄດ້ຮັບທີ່ຕາມມານັ້ນດີ ພວກເຮົາກໍສາມາດປະພຶດຄືນໄດ້ອີກ. ແຕ່ຖ້າຫາກວ່າຜົນໄດ້ຮັບທີ່ຕາມມານັ້ນບໍ່ດີ ພວກເຮົາກໍບໍ່ຄວນປະພຶດແບບນັ້ນອີກ.

ຜົນຮັບທີ່ຕາມມາດ້ານບວກ. ຢູ່ໃນບັນດາຫ້ອງຮຽນ, ຜົນຮັບທີ່ຕາມມາດ້ານບວກໂດຍທົ່ວໄປທີ່ສຸດ ຈະລວມສູນຢູ່ທີ່ຄວາມພໍໃຈຂອງນັກຮຽນ ແລະ ການສ້າງຄວາມເຊື່ອໝັ້ນ ແລະ ຄວາມພາກພູມໃຈໃນຕົນເອງຂອງນັກຮຽນ. ນັກຮຽນຈຳເປັນຕ້ອງຮູ້ ແລະ ຖືກຊຸກເຊີຍ ສຳລັບການປະພຶດຕາມກົດລະບຽບ ກໍຄືເພື່ອຜົນສຳເລັດ ແລະ ຄວາມສຳເລັດຜົນໃນການຮ່ຳຮຽນ. ມີຫຼາຍວິທີການງ່າຍໆເພື່ອຍ້ອງຍໍນັກຮຽນ ເຊັ່ນ ລູບບ່າ ແລະ ເວົ້າວ່າ “ຄູພູມໃຈໃນຕົວນ້ອງ“, ການເລືອກຫົວໜ້າຫ້ອງປະຈຳວັນ, ການເລືອກໃຫ້ ເປັນ “ຜູ້ຊ່ວຍຄູ“ ສຳລັບແຕ່ລະມື້, ຜູ້ຄັດເລືອກກິດຈະກຳກຸ່ມ ຫຼື ໂຄງການ, ການຍ້ອງຍໍຊຸກເຊີຍນັກຮຽນຕໍ່ໜ້າຄູສອນຜູ້ອື່ນໆ ຫຼື ຕໍ່ໜ້າອຳນວຍການໂຮງຮຽນ, ຫຼື ຂໍໃຫ້ນັກຮຽນຊ່ວຍເຫຼືອຜູ້ອື່ນໆ. ທ່ານສາມາດຄົ້ນຄິດວິທີອື່ນໆ ອີກທີ່ອາດສາມາດເຮັດຢູ່ໃນຫ້ອງຮຽນໄດ້ອີກບໍ?

ຜົນຮັບທີ່ຕາມມາດ້ານລົບ. ໃຫ້ຕິດຕາມກວດກາຕົວທ່ານເອງ ກໍຄືຕິດຕາມກວດການັກຮຽນຂອງທ່ານ. ການນຳໃຊ້ຜົນຮັບທີ່ຕາມມາດ້ານລົບເລື້ອຍໆ ຈະສະທ້ອນໃຫ້ເຫັນການຄຸ້ມຄອງຫ້ອງຮຽນທີ່ບໍ່ດີ ແລະ ໂດຍທົ່ວໄປແລ້ວຄວນຫລີກເວັ້ນ. ໃຫ້ຕິດຕາມນັກຮຽນຂອງທ່ານດ້ວຍຄວາມລະມັດລະວັງ ແລະ ເຮັດເປັນປະຈຳ ເພື່ອໃຫ້ທ່ານສາມາດປ້ອງກັນການປະພຶດທີ່ບໍ່ເໝາະສົມກ່ອນທີ່ມັນຈະກາຍເປັນບັນຫາໃຫຍ່ ແລະ ອາດຈະກ່ຽວເອົານັກຮຽນຫຼາຍໆຄົນເຂົ້າມາ. ເພື່ອຢຸດຕິການປະພຶດທີ່ບໍ່ເໝາະສົມ ແບບບໍ່ໃຫ້ລົບກວນການ ເພື່ອວ່າທ່ານຈະບໍ່ລົບກວນການສອນຂອງທ່ານ ຫຼື ຮ້ອງຂໍຄວາມເອົາໃຈໃສ່ເກີນຂອບເຂດຂອງນັກຮຽນນັ້ນ, ໃຫ້ທ່ານພະຍາຍາມ (ກ) ເຂົ້າໄປໃກ້ນັກຮຽນຜູ້ກະທຳຜິດ, ເຮັດການສຳຜັດສາຍຕາ ແລະ ໃຫ້ສັນຍານແບບບໍ່ປາກເວົ້າ ເພື່ອຢຸດຕິການປະພຶດທີ່ບໍ່ເໝາະສົມ, (ຂ) ເອີ້ນຊື່ນັກຮຽນ ຫຼື ໃຫ້ຄຳແນະນຳສັ້ນໆ ເພື່ອຢຸດຕິການປະພຶດທີ່ບໍ່ເໝາະສົມ, (ຄ) ແນະນຳການປະພຶດທີ່ເໝາະສົມໃຫ້ນັກຮຽນຄືນອີກ ໂດຍຢ້ຳໃຫ້ເຫັນສິ່ງທີ່ນັກຮຽນຄວນເຮັດ (ຢ່າໃຊ້ຄຳສັ່ງ “ຢ່າ“) , ແລະ ໃຫ້ເລົ່າຄືນກົດລະບຽບທີ່ເຂົາເຈົ້າຄວນປະຕິບັດຕາມ.

ເຖິງວ່າພວກເຮົາຈະໃຊ້ຄວາມພະຍາຍາມຢ່າງສຸດຂີດແລ້ວກໍຕາມ, ແຕ່ບາງຄັ້ງມັນກໍຈຳເປັນຕ້ອງປະຕິບັດວິໄນນັກຮຽນ. ຕ້ອງແນ່ໃຈວ່າການກະທຳຂອງຄູນັ້ນ ແມ່ນເລັ່ງໃສ່ສະກັດກັ້ນພຶດຕິກຳທີ່ບໍ່ຖືກຕ້ອງຂອງນັກຮຽນ ບໍ່ແມ່ນເລັ່ງໃສ່ຕົວນັກຮຽນ, ມັນແມ່ນຜົນຮັບເນື່ອງຈາກການກະທຳຜິດທີ່ມີເຫດຜົນ, ແລະ ຄູບໍ່ຄວນປະຕິບັດດ້ວຍຄວາມເຮັ່ງຮີບ ຫຼື ດ້ວຍຄວາມຢາກຮ້າຍ. ໂດຍຂຶ້ນກັບທຳມະຊາດຂອງການປະພຶດທີ່ບໍ່ເໝາະສົມນັ້ນ, ບາງວິທີການຂອງການປະຕິບັດວິໄນແບບເບົາໆ ອາດສາມາດປະຕິບັດດ້ວຍວິທີດັ່ງທີ່ຂຽນຢູ່ຂ້າງລຸ່ມນີ້. ແຕ່ຕ້ອງຮັບປະກັນວ່າທ່ານບໍ່ໄດ້ເລືອກການລົງໂທດແບບເຮັດໃຫ້ອັບອາຍຂາຍໜ້າຕໍ່ສາທາລະນະຊົນ!

- ❖ ບໍ່ໃຫ້ພັກຜ່ອນຍາມເລີກຫຼິ້ນ ຫຼື ບໍ່ໃຫ້ຫຼິ້ນກັບໃຜເລີຍ.
- ❖ ຖ່ວງເວລາໄວ້ ຫຼັງຈາກເລີກໂຮງຮຽນ ເພື່ອສົນທະນາການປະພຶດຜິດ, ເປັນຫຍັງມັນຈຶ່ງເກີດຂຶ້ນ ແລະ ຄວນຈະເຮັດແນວໃດ ເພື່ອແກ້ໄຂໃຫ້ຖືກຕ້ອງ.
- ❖ ໃຫ້ປິດເປື້ອງຄວາມຫຍຸ້ງເຫຍີງອອກໄປ.
- ❖ ນັກຮຽນສະແດງຄວາມຂໍໂທດນຳນັກຮຽນຜູ້ທີ່ຖືກໝູ່ກະທຳຜິດຕໍ່.
- ❖ ປ່ຽນບ່ອນນັ່ງປະຈຳ.
- ❖ ຂໍໃຫ້ນັກຮຽນເລົ່າກົດລະບຽບຄືນ ແລະປະຕິບັດຕາມກົດລະບຽບ.
- ❖ ແຈ້ງການໄປຫາຜູ້ປົກຄອງ ຫຼື ໄປຢ້ຽມຢາມເຮືອນຂອງນັກຮຽນ.
- ❖ ເອົາໄປຫາຫົວໜ້າໂຮງຮຽນ, ໂດຍສະເພາະ ເມື່ອມີການປະພຶດທີ່ມີລັກສະນະຮ້າຍແຮງ, ລັກສະນະທຳລາຍເຊັ່ນຕີກັນ, ລົບກວນຊົ່ວໂມງສອນຢ່າງຕໍ່ເນື່ອງ, ຂີ້ລັກ, ອັນຕະພານ, ຄອບຄອງຢາເສບຕິດ ຫຼື ຄອບຄອງສານທີ່ຕ້ອງຫ້າມ ແລະ ຄອບຄອງອາວຸດສິງຄາມ.

5. ຄວາມຮອບຄອບໃນການໃຊ້ການຢັບຢັ້ງນັກຮຽນ “ TIME OUT ”

ມີວິທີການປະຕິບັດວິໄນອັນໜຶ່ງທີ່ນິຍົມປະຕິບັດ ແລະ ໄດ້ມີການໂຕ້ຖຽງກັນເຊິ່ງເປັນທີ່ຮູ້ກັນດີ ກໍຄືວິທີການ “Time out” ໃນໄລຍະ Time out ນີ້, ນັກຮຽນຕ້ອງນັ່ງຢູ່ໃນບ່ອນໃດບ່ອນໜຶ່ງ ແລະ ບໍ່ໃຫ້ຫລິ້ນ ແລະ ບໍ່ອະນຸຍາດໃຫ້ເວົ້າລົມກັບຜູ້ອື່ນໆ. ມີແຕ່ໃຫ້ເບິ່ງໂມງຈົນກວ່າເຂັມວິນາທີຂອງ ແຕ່ລະນາທີໄດ້ຜ່ານໄປ.

Time out ບໍ່ຄວນເປັນທາງເລືອກອັນທີ່ໜຶ່ງ ແຕ່ວ່າເປັນເຕັກນິກສຸດທ້າຍ ເມື່ອເວລາບໍ່ມີ ວິທີອື່ນອີກແລ້ວ ທີ່ຈະປະຕິບັດກັບນັກຮຽນຜູ້ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຫຼື ຕົກຢູ່ໃນ ອັນຕະລາຍຂອງການສ້າງຄວາມເສຍຫາຍໃຫ້ແກ່ເຂົາເອງ. ບໍ່ຄວນນຳໃຊ້ເລື້ອຍ ແລະ ກໍເຮັດໃນ ເວລາສັ້ນໆ. ວິທີການ Time out ອາດໃຫ້ໂອກາດແກ່ນັກຮຽນມິດງຽບລົງ ແລະ ກັບມາຄວບຄຸມ ຕົນເອງໄດ້ພາຍຫລັງສ້າງສະຖານະການທີ່ເສຍຫາຍ. ການໃຊ້ວິທີ Time out ເລື້ອຍໆແມ່ນບໍ່ ເໝາະສົມ, Time out ບໍ່ພຽງແຕ່ບໍ່ມີປະສິດທິຜົນເທົ່ານັ້ນ ແຕ່ຈະສ້າງຄວາມເສຍຫາຍໃຫ້ແກ່ ນັກຮຽນ ເຊັ່ນ ເພີ່ມຄວາມໂກດເຄືອງ ແລະ ມີຄວາມຮຸນແຮງຫຼາຍກວ່າຈະຄວບຄຸມຄວາມ ຮຸນແຮງນຳໃຊ້ Time out ໃນຮູບແບບຂອງການລົງໂທດທາງດ້ານຮ່າງກາຍ ເພື່ອເຮັດໃຫ້ມີການ ເຈັບປວດທາງດ້ານອາລົມຈິດ. ຈະໃຊ້ເວລາດົນປານໃດ ສຳລັບເຮັດ Time out, ອັນນີ້ຍັງເປັນ ຈຸດຖົກຖຽງກັນຢູ່. ມີຊ່ຽວຊານຈຳນວນໜຶ່ງເວົ້າວ່າບໍ່ເກີນສອງ ຫຼື ສາມນາທີ, ໃນຂະນະຜູ້ທີ່ອື່ນໆ ມີຄຳເຫັນວ່າເອົາຕາມອາຍຸຂອງນັກຮຽນ ໂດຍເອົາໜຶ່ງນາທີສຳລັບປີໜຶ່ງ, ຈົນຮອດສິບສອງປີ. ໄດ້ຕົກລົງນຳໃຊ້ໜຶ່ງນາທີຕໍ່ອາຍຸປີໜຶ່ງ ໂດຍການພິສູດ ແລະ ເບິ່ງຂໍ້ຜິດພາດ. ປາກົດວ່າພຽງພໍ ເພື່ອໄດ້ຮັບຜົນສຳເລັດຂອງການປະພຶດແນວດີ ໂດຍປາສະຈາກຄວາມຮູ້ສຶກແຄ້ນເຄືອງ. ກ່ອນ ທ່ານຈະໃຫ້ Time out ແກ່ນັກຮຽນ, ໃຫ້ມີຄວາມແນ່ໃຈໃນສິ່ງຕໍ່ໄປນີ້.

- ❖ ໃຫ້ຫລີກລ່ຽງການນຳໃຊ້ timeout ກັບນັກຮຽນທີ່ຍັງນ້ອຍທຸກຄົນຊຶ່ງເປັນຜູ້ທີ່ບໍ່ຄວນແຍກ ເຂົາເຈົ້າອອກໃຫ້ຢູ່ໂດດດ່ຽວ ຫຼື ປ່ອຍໃຫ້ເຂົາເຈົ້າໄປ ໂດຍບໍ່ມີການກະຕຸກຊຸກຍູ້ໃດໆ.
- ❖ ຜົນໄດ້ຮັບທີ່ຕາມມາຄວນເປັນໄປຕາມການປະພຶດຂອງນັກຮຽນຢ່າງທັນທີທັນໃດ. ເມື່ອ ເວລານັກຮຽນເຫັນຜົນທີ່ຕາມມາທັນທີທັນໃດ ຍ້ອນການເຮັດໃຫ້ຜູ້ອື່ນເສຍຫາຍ, ເຂົາເຈົ້າ ເຂົ້າໃຈຢ່າງຈະແຈ້ງກວ່າເກົ່າ ວ່າເປັນຫຍັງທ່ານຈຶ່ງປະຕິບັດວິໄນເຂົາເຈົ້າ. ເວລາໃດກໍໄດ້ ທີ່ເປັນໄປໄດ້, ທ່ານຄວນໃຫ້ທາງເລືອກອັນດີແກ່ນັກຮຽນ ເພື່ອໃຫ້ເຂົາເຈົ້າປະຕິບັດ (ບອກ ນັກຮຽນໃຫ້ຈັດການກັບຄວາມຫຍຸ້ງເຫຍີງທີ່ເຂົາເຈົ້າໄດ້ສ້າງມັນຂຶ້ນມາ, ເປັນສິ່ງທີ່ສ້າງສັນ ກວ່າວິທີທີ່ຍ້າຍເຂົາອອກ ໄປຈາກສະຖານທີ່ໄປຕະຫລອດ).
- ❖ Timeout ບໍ່ຄວນເຮັດໃຫ້ນັກຮຽນມີຄວາມຮູ້ສຶກຖືກຊູ່ເຂັນ ຫຼື ມີຄວາມຢ້ານກົວ. ບໍ່ຄວນໃຊ້ຕັ້ງອີ້ ຫຼື ບ່ອນພິເສດສຳລັບເຮັດ Time out ຍ້ອນວ່າສິ່ງນີ້ ຈະບັ່ງຄັບແນວຄິດ ທີ່ວ່າ Time out ແມ່ນການລົງໂທດ ແລະ ອາດເປັນສາເຫດໃຫ້ມີພາລະຫ່ວງໄຍເກີນ ຄວນ. ທ່ານບໍ່ຄວນເຮັດໃຫ້ນັກຮຽນມີຄວາມຮູ້ສຶກຖືກເຢາະເຢີ້ຍ ຫຼື ຖືກໂດດດ່ຽວຈັກເທື່ອ ໃນໄລຍະ ເວລາເຮັດ Time out.

- ❖ ບໍ່ຄວນປະໃຫ້ນັກຮຽນຢູ່ພຽງຜູ້ດຽວ ເວັ້ນເສຍແຕ່ວ່າເຂົາເຈົ້າມີຄວາມຕ້ອງການຢາກຢູ່ຜູ້ດຽວ. ນັກຮຽນໂດຍສະເພາະແມ່ນນັກຮຽນຜູ້ທີ່ຍັງນ້ອຍ ທີ່ມີຄວາມຕ້ອງການການຊ່ອຍເຫຼືອຈາກຜູ້ໃຫຍ່ ເພື່ອຊ່ອຍໃຫ້ເຂົາເຈົ້າມີຄວາມຮູ້ສຶກທີ່ດີ. ຖ້າຫາກທ່ານສະແດງໃຫ້ນັກຮຽນຂອງທ່ານເຫັນວ່າຄວາມຮູ້ສຶກ ຂອງເຂົາເຈົ້າໄດ້ຮັບຄວາມເອົາໃຈໃສ່, ເຂົາເຈົ້າກໍຈະນັບຖືຄວາມຮູ້ສຶກຂອງຜູ້ອື່ນຫຼາຍຂຶ້ນ.
- ❖ Timeout ບໍ່ຄວນແກ່ຍາວເວລາຈົນກວ່າເວລານັກຮຽນມີດຽງບລົງ. ພາຍຫຼັງນັກຮຽນມີດຽງບລົງແລ້ວໃຫ້ອະທິບາຍຢ່າງຈະແຈ້ງວ່າການປະພຶດອັນໃດທີ່ເໝາະສົມ ແລະ ບໍ່ເໝາະສົມ. ຈະຕ້ອງໃຫ້ມີຄວາມກະຈ່າງແຈ້ງຕໍ່ນັກຮຽນວ່າ ເປັນຫຍັງທ່ານຈຶ່ງໄດ້ໃສ່ວິໄນເຂົາເຈົ້າ, ຖ້າບໍ່ດັ່ງນັ້ນ, ນັກຮຽນມັກຈະເຮັດການປະພຶດທີ່ບໍ່ເໝາະສົມອີກ.
- ❖ ໃຫ້ຫຼີກເວັ້ນການຂູ່ເຂັນ. ຢ່າໄດ້ເວົ້າຈັກເທື່ອ “ຖ້າເຈົ້າເຮັດຄືນອີກ, ເຈົ້າຈະໄດ້ຮັບ Time out”. ອັນນີ້ມັນຈະສ້າງຄວາມສັບສົນໃຫ້ແກ່ນັກຮຽນ ແລະ ຈະເປັນຮູບແບບການລົງໂທດໃນທາງລົບ ແລະ ບໍ່ຄ່ອຍມີປະສິດທິຜົນ.
- ❖ ໃຫ້ປັບປຸງວິທີການໃສ່ວິໄນຕໍ່ນັກຮຽນເປັນລາຍບຸກຄົນ. ເດັກພັດທະນາຄວາມອາດສາມາດຂອງເຂົາເຈົ້າ ເພື່ອຄວບຄຸມເຂົາເຈົ້າໃນອັດຕາສ່ວນແຕກຕ່າງກັນ. ໃຫ້ເອົາໃຈໃສ່ຄວາມຕ້ອງການສະເພາະໃດໜຶ່ງຂອງນັກຮຽນ. ບໍ່ມີເຕັກນິກອັນໜຶ່ງອັນດຽວຈະໃຊ້ໄດ້ກັບເດັກທຸກຄົນໃນທຸກໆເວລາ.Timeoutບໍ່ແມ່ນນຳໃຊ້ເພື່ອເຮັດການລົງໂທດ. Time out ແມ່ນໂອກາດສຳລັບນັກຮຽນ ເພື່ອແກ້ໄຂແນວຄິດຈິດໃຈຂອງເຂົາ ແລະ ເຂົ້າຮ່ວມຢູ່ໃນກຸ່ມ ຫຼື ກິດຈະກຳຄືນອີກໃນວິທີທີ່ໄດ້ຜົນຜະລິດດີຂຶ້ນ. ໄດ້ສິດສອນນັກຮຽນໃຫ້ຮູ້ແກ້ບັນຫາຂອງເຂົາເອງແນວໃດ ດ້ວຍຄວາມເອົາໃຈໃສ່ ແລະ ການຊ່ອຍເຫຼືອ ແລະ Time out ອາດຈະບໍ່ຈຳເປັນອີກຕໍ່ໄປ.

6. ການແກ້ໄຂຂໍ້ຂັດແຍ່ງ

ເຖິງວ່າທ່ານກໍຄືນັກຮຽນ ແລະ ຜູ້ປົກຄອງໄດ້ໃຊ້ຄວາມພະຍາຍາມແລ້ວກໍຕາມ, ການລົບກວນການທຳລາຍກໍ່ກວນຫຼາຍຢ່າງຢູ່ໃນສະພາບແວດລ້ອມຫ້ອງຮຽນ ແລະ ໂຮງຮຽນກໍຍັງຈະເກີດຂຶ້ນຈາກຄວາມຂັດແຍ່ງຂອງນັກຮຽນ. ປະເດັນນີ້ຖືວ່າເປັນເຫດຜົນທົ່ວໄປທີ່ຕ້ອງໄດ້ຈັດກອງປະຊຸມຜູ້ປົກຄອງ-ຄູສອນ (ເຖິງແມ່ນວ່າມັນຈະເປັນພາຫານະພຽງອັນດຽວ). ຂໍ້ຂັດແຍ່ງນີ້ ອາດຈະເປັນຮູບແບບຂອງການດູໝິ່ນປະໝາດ, ຫລອກລໍ້, ຕີກັນ, ບັນຫາແກ້ແຄ້ນຄືນ, ຂໍ້ຂັດແຍ່ງກ່ຽວກັບການຍາດບ່ອນຫຼິ້ນ, ການຢາກເຂົ້າເຖິງ ຫຼື ຢາກຄອບຄອງວັດຖຸ-ອຸປະກອນ ລວມທັງເລື່ອງວິຊາການ-ການຮ່ຳຮຽນ. ຄວາມຂັດແຍ່ງເຫຼົ່ານີ້ ເກີດມີຂຶ້ນຈາກການອັນຕະພານ, ຂໍ້ຂັດແຍ່ງເຫຼົ່ານີ້ຈະເກີດຂຶ້ນ ໂດຍສະເພາະຈາກການຂົ່ມເຫັງລັງແກ ແລະ ຂະຫຍາຍອອກຢ່າງວ່ອງໄວ ຖ້າຫາກບໍ່ໄດ້ຮັບການເຈລະຈາ ຫຼື ບໍ່ມີການໄກ່ເກ່ຍ.

ແນວທາງທີ່ດີເພື່ອຫຼຸດຜ່ອນການລົບກວນທຳລາຍ ແລະ ການປະພຶດທີ່ບໍ່ເໝາະສົມໃຫ້ໜ້ອຍລົງ ແມ່ນການສອນນັກຮຽນໃຫ້ຮູ້ວ່າຈະແກ້ໄຂຂໍ້ຂັດແຍ່ງຂອງເຂົາເຈົ້າເອງແນວໃດ. ພ້ອມກັນນີ້ ກໍແກ້ໄຂບັນຫາການຄຸ້ມຄອງຫ້ອງຮຽນ, ວິທີການນີ້ ຈະສອນທັກສະທີ່ເປັນປະໂຫຍດໃຫ້ແກ່ນັກຮຽນເຊິ່ງຈະເອົາໄປໃຊ້ຢູ່ນອກຫ້ອງຮຽນ.

ການວິໄຈກ່ຽວກັບ ການແກ້ໄຂຄວາມຂັດແຍ່ງໃນໝູ່ນັກຮຽນໄດ້ຊີ້ໃຫ້ເຫັນຈຸດສຳຄັນ ດັ່ງຕໍ່ໄປນີ້.

(ກ) ຄວາມຂັດແຍ່ງໃນໝູ່ນັກຮຽນເກີດຂຶ້ນເລື້ອຍໆຢູ່ໃນໂຮງຮຽນ(ເຖິງວ່າຄວາມຂັດແຍ່ງຈະມີຜົນໃຫ້ ເກີດການບາດເຈັບໜັກໜ້ອຍຄັ້ງກໍຕາມ).

(ຂ) ນັກຮຽນທີ່ບໍ່ໄດ້ຮັບການເຝິກອົບຮົມ ໂດຍປົກກະຕິຈະຍຸດທະສາດຄວາມຂັດແຍ່ງ ເພື່ອເຮັດໃຫ້ມີການທຳລາຍລົບກວນ, ແລະ ນັກຮຽນເຫຼົ່ານີ້ຈະບໍ່ສົນໃຈເລື່ອງຄວາມສຳພັນກັບຜູ້ອື່ນໆ ທີ່ດຳເນີນໄປຢູ່ນັ້ນ.

(ຄ) ແຜນງານການແກ້ໄຂຄວາມຂັດແຍ່ງ ແລະ ການໄກ່ເກ່ຍຂອງໝູ່ເພື່ອນດ້ວຍກັນ ເຫັນວ່າມີປະສິດທິຜົນຢູ່ໃນການສິດສອນນັກຮຽນ ໃຫ້ມີທັກສະການເຈລະຈາແບບບູລະນາການ ແລະ ທັກ ສະການໄກ່ເກ່ຍ.

(ງ) ຫຼັງຈາກການເຝິກອົບຮົມ, ນັກຮຽນມີທ່າອ່ຽງນຳໃຊ້ທັກສະນະການເຈລະຈາຄວາມຂັດແຍ່ງເຫຼົ່ານີ້ ເຊິ່ງພາໃຫ້ມີຜົນໄດ້ຮັບທີ່ສ້າງສັນ.

(ຈ) ຜົນສຳເລັດຂອງນັກຮຽນໃນການແກ້ໄຂຂໍ້ຂັດແຍ່ງ ຈະມີທ່າອ່ຽງຫຼຸດຜ່ອນຈຳນວນຂໍ້ຂັດແຍ່ງລະຫວ່າງນັກຮຽນ-ນັກຮຽນເຊິ່ງເຮັດໃຫ້ຄູສອນ ແລະ ຜູ້ບໍລິຫານໂຮງຮຽນຫຼຸດຜ່ອນຄວາມຈຳເປັນໃນການໃຊ້ລະບຽບວິໄນອັນເຄັ່ງຄັດ.

ຂະບວນການພື້ນຖານ ເພື່ອສິດສອນນັກຮຽນຂອງທ່ານໃຫ້ເປັນຜູ້ມີຄວາມປະນີປະນອມມີຢູ່ 3 ບາດກ້າວຄື :

1. ສອນທັກສະນະດ້ານການເຈລະຈາໃຫ້ນັກຮຽນ ທີ່ເຮັດໃຫ້ເຂົາເຈົ້າສາມາດ:

(ກ). ກຳນົດຂໍ້ຂັດແຍ່ງຂອງເຂົາເຈົ້າໄດ້ (ພວກເຮົາຖຽງກັນກ່ຽວກັບອັນໃດ? ປະເດັນນີ້ໄດ້ເກີດຂຶ້ນແນວໃດ ແລະ ຍ້ອນຫຍັງ ?).

(ຂ). ແລກປ່ຽນທັດສະນະ ແລະຂໍ້ສະເໜີ (“ຂ້ອຍຄິດວ່າມັນຄວນເປັນແນວນີ້ຍ້ອນວ່າ...”).

(ຄ). ເບິ່ງສະຖານະການຈາກແນວຄວາມຄິດທັ້ງສອງຝ່າຍສອງມຸມ(ໂດຍຜ່ານການສະແດງບົດບາດ ສົມມຸດ).

(ງ). ຕົກລົງເອົາທາງເລືອກທີ່ນັກຮຽນທັ້ງສອງຮັບ (ວິທີແກ້ໄຂແບບທຸກຝ່າຍຊະນະ “ຊະນະ-ຊະນະ”ເຊັ່ນພວກເຮົາຈະພະຍາຍາມເຮັດຕາມວິທີຂອງເຈົ້າໃນມື້ນີ້ ແລະ ມື້ອື່ນເຮັດຕາມວິທີຂອງຂ້ອຍ ເພື່ອເບິ່ງວ່າອັນໃດຈະດີທີ່ສຸດ),

(ຈ). ບັນລຸການຕົກລົງທີ່ມີຄວາມລະອຽດອ່ອນນຳກັນ.

2. ສອນນັກຮຽນໃຫ້ຮູ້ວິທີໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງ ຂອງເພື່ອນຮ່ວມຫ້ອງຮຽນແບບສ້າງສັນ ນັ້ນຄືແນວໃດ. ການໄກ່ເກ່ຍເປັນຂະບວນການຂອງການນຳໃຊ້ການບໍລິການ ຫຼື ຄວາມສາ ມາດຂອງຄົນອື່ນ ເພື່ອຊ່ອຍລະງັບການໂຕ້ຖຽງກັນ. ເພື່ອຈະສອນເລື່ອງການໄກເກ່ຍນັ້ນ ໃຫ້ ເລືອກເອົາປະເດັນທີ່ອາດຈະເກີດຂຶ້ນ ຫຼື ໄດ້ເກີດຂຶ້ນແລ້ວລະຫວ່າງນັກຮຽນຂອງທ່ານສອງຄົນ. ໃຫ້ນັກຮຽນທັງສອງນັ້ນສະແດງບົດບາດສົມມຸດປະເດັນນັ້ນ ແລະ ບອກໃຫ້ນັກຮຽນຜູ້ທີ່ສາມຊ່ອຍ ເຫຼືອເພື່ອນຂອງເຂົາ ເພື່ອກ້າວເຖິງຂໍ້ຕົກລົງກັນ ໂດຍນຳໃຊ້ຄວາມຮູ້ກ່ຽວກັບເພື່ອນຂອງລາວ, ກ່ຽວກັບປະເດັນບັນຫາ ແລະ ສິ່ງທີ່ລາວຄິດວ່າອັນໃດຈະເປັນການປະນີປະ ນອມທີ່ດີ.

4. ເມື່ອນັກຮຽນທຸກຄົນໄດ້ຮຽນຮູ້ທັກສະຂອງການເຈລະຈາ ແລະ ການໄກ່ເກ່ຍແລ້ວ. ໃນແຕ່ ລະມື້ໃຫ້ແຕ່ງຕັ້ງນັກຮຽນສອງຄົນ (ດີແທ້ໃຫ້ເປັນນັກຮຽນຍິງໜຶ່ງຄົນ ແລະ ນັກຮຽນຊາຍໜຶ່ງຄົນ) ໃຫ້ເປັນຜູ້ໄກ່ເກ່ຍທາງການ.ພາລະໜ້າທີ່ນີ້ໃຫ້ໝູນວຽນໄປຈົນຄົບໝົດທຸກຄົນໃນຫ້ອງແລະໃຫ້ນັກ ໄກ່ເກ່ຍເຫຼົ່ານີ້ໄກ່ເກ່ຍຂໍ້ຂັດແຍ່ງໃດໜຶ່ງທີ່ບໍ່ສາມາດແກ້ໄຂໄດ້ຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

ບົດບາດຂອງຄູແມ່ນຕ້ອງສະໜັບສະໜູນຊ່ອຍເຫຼືອ ຂະບວນການເຫຼົ່ານີ້ດ້ວຍການສິດ ສອນ,ເປັນຕົວແບບ ແລະ ໃຫ້ຄຳເປີກສາແນະນຳ. ຄູຄວນສ້າງແຜນງານໂຄງການ ເພື່ອແກ້ໄຂໝູດ ໝ່ອນຂໍ້ຂັດແຍ່ງ.

7. ເຕັກເນິກໃນການປະຕິບັດລະບຽບວິໄວ/ສຶກສາອົບຮົມແບບສ້າງສັນຕາມໄວອາຍຸ

ຄວາມເຂົ້າໃຈກ່ຽວກັບນັກຮຽນມີພັດທະນາໄປຄືແນວໃດ ຈະຊ່ອຍໃຫ້ທ່ານຮູ້ຈັກສິ່ງທີ່ຈະຄາດ ຫວັງ. ເດັກມີການປ່ຽນແປງ ແລະ ພັດທະນາໄປຢ່າງສະໝ່ຳສະເໝີເມື່ອເຂົາເຕີບໂຕຂຶ້ນ. ບັນດາ ນັກວິໄຈໄດ້ຄົ້ນພົບວ່າເດັກໄວໜຸ່ມຈະຜ່ານຂັ້ນຕອນສະເພາະຂອງການພັດທະນາໄປຕາມວິທີທາງ ຂອງເຂົາ. ແນວຄວາມຄິດທີ່ຢູ່ເບື້ອງຫລັງຂອງ“ອາຍຸ ແລະ ຂັ້ນຕອນ“ ເຫຼົ່ານີ້ແມ່ນຢູ່ບ່ອນວ່າພຶດຕິ ກຳອັນແນ່ນອນໃດໜຶ່ງຖືເປັນສິ່ງທຳມະດາ ຫຼື ເໝາະສົມກັບໄວອາຍຸນັ້ນ ແລະ ບໍ່ແມ່ນໃນຊ່ວງອາຍຸ ອື່ນ. ຕາຕະລາງໃນຕໍ່ໄປນີ້ໄດ້ພັນລະນາເຖິງການພັດທະນາຂອງເດັກ ໃນແຕ່ລະສ່ຳອາຍຸທີ່ແນ່ ນອນ ແລະ ວິທີສິດສອນ ແລະ ວິທີປະຕິບັດວິໄນອັນໃດ ທີ່ສາມາດນຳໃຊ້ກັບເດັກໃນແຕ່ລະໄວ ອາຍຸດັ່ງກ່າວ:

ໄວອາຍຸ ແລະ ວິທີການທີ່ເປັນຂັ້ນຕອນເພື່ອປະຕິບັດວິໄນ/ສຶກສາອົບຮົມແບບສ້າງ ສັນ.

ອາຍຸ	ການພັດທະນາ	ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ ການປະຕິບັດວິໄນ/ການສຶກສາອົບຮົມ
5 ປີ	ມີທ່າອ່ຽງຈະຢູ່ສະຫງົບ, ມິດງຽບ, ມີການຊັ່ງ ຊາທີ່ດີ. ຕາມທຳມະດາ, ເຂົາເຈົ້າຈະພະຍາ	ເຮັດໃຫ້ເຂົາເຈົ້າຮູ້ຈັກວ່າ ອັນໃດທີ່ມີເຫດຜົນ ແລະ ບໍ່ມີເຫດຜົນເພື່ອຄາດຫວັງ. ມີຫຼາຍສິ່ງຫຼາຍຢ່າງ

ອາຍຸ	ການພັດທະນາ	ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ ການປະຕິບັດວິໄນ/ການສຶກສາອົບຮົມ
	ຍາມເຮັດສິ່ງທີ່ ເຂົາຮູ້ວ່າເຂົາສາມາດເຮັດໄດ້, ດັ່ງນັ້ນຈຶ່ງມີຄວາມ ສະບາຍໃຈໃນການຈັດ ເຂົ້າລະບຽບ. ຄວາມເປັນມິດ, ຄວາມຮັກ ແພງ, ຄວາມຮູ້ບຸນຄຸນ, ຕ້ອງການເຮັດໃຫ້ພໍ ໃຈ ແລະເຮັດສິ່ງທີ່ຖືກຕ້ອງ, ຕ້ອງການ ແລະ ມຸ່ງໝາຍຢາກເປັນຄົນດີ, ຍັງບໍ່ທັນສາມາດ ຮັບເອົາການກະທຳຜິດ, ເຂົາພະຍາຍາມ ຫຼາຍເທົ່າທີ່ຈະຫຼາຍໄດ້, ບໍ່ໄດ້ບອກຄວາມຈິງ ສະເໝີໄປ.	ທີ່ຄູເຫັນວ່າບໍ່ດີນັ້ນ ແມ່ນສິ່ງທີ່ຍັງບໍ່ສຸກງອມ. ການ ປ້ອງກັນຈະດີກວ່າການຮັບຜົນໃນທາງລົບ. ເຖິງ ຢ່າງໃດກໍດີຖ້າ ທ່ານເຮັດຄືແນວນັ້ນ, ກໍໃຫ້ເຮັດ ແບບງ່າຍໆ. ນັກຮຽນມີຄວາມມຸ່ງໝາຍຈະເປັນ ຄົນດີ ແລະ ເຮັດສິ່ງທີ່ ຖືກຕ້ອງ, ນັ້ນເປັນຈຸດແຂງ. ດ້ວຍຄວາມໂຊກດີ, ອາດມີຄວາມຈຳເປັນໜ້ອຍ ລົງ ທີ່ຈະມີຜົນໄດ້ຮັບໃນ ທາງລົບ.
6 ປີ	ມີອາລົມຈິດຮຸນແຮງ, ຮັກໃນໜຶ່ງນາທີຕໍ່ໄປ ກຽດຊັງ. ມີຄວາມສັບສົນຫຼາຍ ແລະ ສ້າງ ຄວາມລຳບາກລະຫວ່າງຕົນເອງ ແລະ ຜູ້ອື່ນ. ອາດຮຽກຮ້ອງຄວາມຕ້ອງການ, ດື້ດຶງຖຽງ ຄວາມຫຼືຕີ. ໃນເວລາມີອາລົມດີ ຈະມີຄວາມ ຊື່ນບານມີຄວາມຫ້າວຫັນ ແລະ ກະຕືລືລົ້ນ. ຕ້ອງການການຍ້ອງຍໍ, ແຕ່ວ່າປະພຶດແນວຖືກ ຕຳນິເລື້ອຍໆ. ອັນນີ້ ພຽງແຕ່ເຮັດໃຫ້ການ ປະພຶດຂີ້ລ້າຍກວ່າເກົ່າເທົ່ານັ້ນ. ຍັງບໍ່ທັນສາ ມາດບອກໄດ້ເຖິງຄວາມແຕກຕ່າງ ລະຫວ່າງ ຂອງຂ້ອຍແລະຂອງເຈົ້າ	ໃຫ້ມີຄວາມອົດທົນ. ບໍ່ສົນໃຈຕໍ່ການປະຕິເສດ ຂອງເດັກ ຫຼື ບໍ່ສະແດງຄວາມຮູ້ສຶກເຫັນໃຈອອກ ມາ ເມື່ອເວລານັກຮຽນຕອບ "ຂ້ອຍຈະ ບໍ່ເຮັດ" ຫຼື "ຂ້ອຍບໍ່ສາ ມາດ" ການຊຸກເຊີຍມັນອາດບໍ່ງ່າຍ ເພື່ອຊອກສິ່ງໃດສິ່ງໜຶ່ງ ເພື່ອຊຸກເຊີຍ. ແຕ່ວ່າ ພະຍາຍາມໃຫ້ຫຼີກເວັ້ນການຕໍ່ຕ້ານ ຫຼື ປະເຊີນ ໜ້າ, ໃຫ້ຫຼີກເວັ້ນປະເດັນທີ່ລະອຽດອ່ອນ ຖ້າຫາກ ເປັນໄປໄດ້, ໃຫ້ການລະໂອກາດພິເສດ ຖ້າຫາກ ວ່າຈະນຳພາໄປສູ່ການປະພຶດອັນດີ ຫຼື ປະສົບ ການ ຂອງການຮ່ຳຮຽນ.
7 ປີ	ມີຄວາມສະຫງົບຫຼາຍກວ່າມີອາລົມຈິດ ໃນ ທາງລົບ, ອາດເປັນຄົນເອົາຈິງເອົາຈັງ ເອົາໃຈ ຕົນເອງ, ອາລົມປ່ຽນແປງເລື້ອຍ, ກວນໃຈ ຫຼື ໜ້າສົງໄສ. ມີຄວາມ ອ່ອນໄຫວງ່າຍຕໍ່ອາລົມ ຈິດຂອງຜູ້ອື່ນ. ອາດເຮັດໃຫ້ຜູ ອື່ນບໍ່ມັກ ແລະ ເຂົາເຈົ້າກໍຕຳນິ ຫຼື ເຮັດໃຫ້ມີການຫົວ.	ບັນຫາຂອງການເຊື່ອຟັງຄວາມອາດເກີດມີ ຍ້ອນ ວ່ານັກຮຽນເປັນຄົນວອກແວກ. ເພື່ອຢາກໃຫ້ນັກ ຮຽນເຮັດກິດຈະກຳທີ່ງ່າຍໆ, ໃຫ້ບອກເຂົາເຈົ້າ ລ່ວງໜ້າ ເພື່ອເຮັດໃຫ້ແນ່ໃຈວ່າ ເຂົາໄດ້ຍິນຄຳ ແນະນຳ ຫລື ບໍ່. ໃຫ້ເຕືອນນັກຮຽນກ່ອນ ທີ່ເຂົາຈະລືມ ເພື່ອໄປເຮັດອັນອື່ນ. ໃຫ້ການຍ້ອງ ຍໍຊຸກເຊີຍໜ້ອຍໜຶ່ງ ສຳລັບຄວາມປະສົບຜົນສຳ ເລັດຂອງເຂົາ.
8 ປີ	ຂະຫຍັນຂັນແຂງ, ວ່ອງໄວ, ຊອກຮູ້ຊອກ ເຫັນ, ບໍ່ອົດທົນ ແລະມັກຮຽກຮ້ອງ, ອາລົມ ບໍ່ປ່ຽນແປງຄືເດັກອາຍຸ 7 ຂວບ. ແຕ່ວ່າຍັງ ເປັນຄົນອ່ອນໄຫວ. ຕ້ອງການເວລາ, ຄວາມ	ໃຫ້ຂໍ້ແນະນຳແກ່ນັກຮຽນ ໃນວິທີທີ່ຮັບເອົາໄດ້. ການໃຫ້ເວລາ, ຄວາມເອົາໃຈໃສ່ ແລະ ຄວາມ ເຫັນດີເປັນສິ່ງກະຕຸ້ນທີ່ດີ. ໃຫ້ນຳໃຊ້ກິດຈະກຳ ການແກ້ໄຂບັນຫາເປັນພາຫານະ ເພື່ອພັດທະນາ

ອາຍຸ	ການພັດທະນາ	ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ ການປະຕິບັດວິໄນ/ການສຶກສາອົບຮົມ
	ເອົາໃຈໃສ່ ແລະ ຄວາມເຫັນດີ, ເລີ່ມຕົ້ນ ຄົ້ນຄິດສິ່ງທີ່ເປັນນາມມະທຳ, ມີຄວາມສົນໃຈ ແລະ ເປັນຫວ່ງກ່ຽວກັບຄວາມເປັນເຈົ້າຂອງ.	ການຄົ້ນຄິດສິ່ງທີ່ເປັນນາມມະທຳ. ໃຫ້ຍ້ອງຍໍຊົມເຊີຍໜ້ອຍໜຶ່ງ ສຳລັບ ຄວາມປະສົບຜົນສຳເລັດ.
9 ປີ	ຈະມີອາລົມສະຫງົບກ່ອນເດັກອາຍຸ 8 ປີ. ຈະເຫັນວ່າມີຄວາມເປັນເອກະລາດ, ມີຄວາມຮັບຜິດຊອບ, ສາມາດອາໄສໄດ້ ແລະ ມີຄວາມຮ່ວມມື. ບາງຄັ້ງມີອາລົມປ່ຽນແປງງ່າຍ ແຕ່ກໍເຫດຜົນພື້ນຖານຮັບການຕຳນິຢ່າງຍຸຕິທຳ ຖ້າຫາກວ່າ ເວົ້າຢ່າງລະອຽດຖີ່ຖ້ວນ, ມີຄວາມສົນໃຈຕໍ່ຄວາມ ຍຸດຕິທຳຄຳເວົ້າຂອງໝູ່ເພື່ອນອາດຈະສຳຄັນ ກວ່າຄຳເວົ້າຂອງຜູ້ໃຫຍ່. ເອົາຕົນເອງເຂົ້າມາຮ່ວມຫລາຍທີ່ສຸດ ແລະ ອາດຈະບໍ່ໄດ້ຍິນເມື່ອເວລາເຮົາເວົ້ານຳ ອາດມີປາກົດການໃຈລອຍ ແລະ ວາງເສີຍ, ອາດສະແດງໃຫ້ເຫັນຄວາມເປັນຫ່ວງຕໍ່ຜູ ອື່ນໆ.	ສົ່ງເສີມການມີຄວາມຮັບຜິດຊອບໂດຍຜ່ານການມອບໝາຍວຽກໃຫ້ເຮັດ (ຂໍຮ້ອງໃຫ້ເຮັດ). ນຳໃຊ້ການຮ່ຳຮຽນແບບຮ່ວມມືກັນ, ແຕ່ວ່າເຮັດການຕິດຕາມກຳກັບກິດຈະກຳ ທີ່ມີລັກສະນະມະນຸດສຳພັນ, ນຳໃຊ້ການແນະນຳການຮ່ຳຮຽນ ໂດຍຜ່ານໂຄງການຫຼາຍກວ່າ ເຮັດແບບບັນລະຍາຍໄປຕະຫຼອດໄວອາຍຸ 10 ຂວບ
10 ປີ	ມຸ່ງໝັ້ນແບບມີອາລົມ, ງ່າຍດາຍ, ເຂົ້າໃຈງ່າຍ, ມີການ ຊັ່ງຊາທີ່ດີ, ແຕ່ຍັງຄົງຄືເດັກຢູ່, ຄວາມຫ່ວງໄຍໜ້ອຍ ແລະ ຄວາມຕ້ອງການ ນ້ອຍກວ່າເດັກອາຍຸ 9 ປີ. ສ່ວນຫລາຍ ຈະເປັນຄົນນິໄສດີ ແລະ ພໍໃຈໃນຊີວິດຂອງຕົນ. ແຕ່ວ່າອາດຈະສະແດງ ໃຫ້ເຫັນຄວາມຂີ້ໂກງ, ມີອາລົມຮຸນແຮງ ບໍ່ເປັນໄວອາຍຸທີ່ເຮັດໃຫ້ກັງວົນ. ຍັງຄົງມີຄວາມຢ້ານກົວຢູ່ແດ່. ມີຄວາມມ່ວນຊື່ນກັບອາລົມຂັນຂອງຕົນເອງ ຊຶ່ງອາດບໍ່ເປັນເລື່ອງສະໜຸກສະໜານ ສຳລັບຜູ້ອື່ນ, ເປັນໄວອາຍຸທີ່ລ່າເລີງ	ເອົາຄວາມອາດສາມາດຂອງນັກຮຽນ ເຂົ້າມາຮ່ວມ ເພື່ອໃຫ້ຈຳແນກໄດ້ລະຫວ່າງອັນດີ ແລະ ອັນບໍ່ດີ ລະຫວ່າງອັນຖືກ ແລະ ອັນຜິດລະຫວ່າງ ຄວາມຈິງ ແລະ ບໍ່ຈິງ, ເຕັກນິກທີ່ດີທີ່ສຸດທີ່ຈະຕ້ອງຮູ້ ແມ່ນການຄາດຫວັງຢ່າງມີເຫດຜົນ. ເອົານັກຮຽນເຂົ້າມາຮ່ວມ ເພື່ອສ້າງຕັ້ງຄະນະຫ້ອງ, ລວມທັງຄະນະຮັບຜິດຊອບ ເລື່ອງລະບຽບວິໄນ. ໃຫ້ນຳໃຊ້ອາລົມຂັນຢູ່ໃນການສິດສອນ.
11 ຫາ 13 ປີ	ເປັນໄວລຸ້ນໄລຍະເລີ່ມຕົ້ນ, ໄລຍະເວລາມີການປ່ຽນແປງໄວ, ມີການພັດທະນາຄວາມເປັນເອກະລັກຂອງຕົນເອງ ແລະ ມີຄວາມເປັນເອກະລາດຫຼາຍຂຶ້ນ. ຕ້ອງການຄວາມເປັນສ່ວນຕົວເພີ່ມຂຶ້ນ ແລະ ອາດມີຄວາມອ່ອນໄຫວຕໍ່ການຢອກລ້ໍ, ອາລົມອ່ອນໄຫວ.	ເຮັດໃຫ້ນັກຮຽນຮູ້ຈັກວ່າ ທ່ານມີຄວາມກັງວົນນຳເຂົາເຈົ້າ.ໃຫ້ຈັດຕັ້ງກິດຈະກຳການ "ແລກປ່ຽນຄວາມຄິດເຫັນ "(ເຊັ່ນ ຊຸງນບົດຄວາມ) ທີ່ກ່ຽວກັບປະສົບການ ແລະ ຄວາມຮູ້ສຶກຂອງນັກຮຽນ. ເປັນຕົວຢ່າງ ໃນການເຄົາລົບນັບຖືກັນ. ຈຳກັດການຕຳນິແລະຈູ້ຈີ້ລຳໄລ. ຢ່າປ່ອຍໃຫ້ມີການ

ອາຍຸ	ການພັດທະນາ	ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ ການປະຕິບັດວິໄນ/ການສຶກສາອົບຮົມ
	ເຫັນ ຄວາມ ສຳຄັນຂອງໝູ່ເພື່ອນຫຼາຍຂຶ້ນ.	ຢອກລໍ້ ຫຼືດູໝິ່ນປະໝາດ.
14 - 16 ປີ	ເປັນໄວລຸ່ນໄລຍະກາງ, ຄວາມເປັນເອກະລາດເພີ່ມຂຶ້ນ, ມີການພັດທະນາທາງດ້ານເພດ ແລະ ຄິດເອົາແຕ່ຕົນເອງ. ມີໝູ່ຄູ່ຫຼາຍ ແລະ ຮູ້ຈັກນຶກຄິດ. ການຄິ້ນຄິດຈະມີລັກສະນະເດັກໜຸດໜ້ອຍລົງ. ເຂົາເຈົ້າຮູ້ຈັກພິຈາລະນາຄວາມເປັນຈິງ ແລະ ສາມາດເຮັດການຕັດ ສິນໃຈອັນດີ.	ຊຸກຍູ້ສົ່ງເສີມໃຫ້ມີການພົວພັນອັນດີ ໂດຍຜ່ານການແລກປ່ຽນຄວາມເຫັນ. ໃຫ້ຄວາມຄິດເຫັນໃນສິ່ງເປັນຫົວຄິດປະດິດສ້າງ ເພື່ອປະຕິບັດກັບໝູ່ເພື່ອນ ຊຶ່ງເປັນພາກສ່ວນໜຶ່ງຂອງການຮ່ຳຮຽນ. ມີຂໍ້ຈຳກັດຢ່າງມີເຫດຜົນ ແລະ ມີຄວາມສະໝ່ຳສະເໝີປາຍ ແລະ ຍຸຕິທຳໃນການປະຕິບັດກົດລະບຽບ. ໃຫ້ແນ່ໃຈວ່າ ເຂົາເຈົ້າຮູ້ຈັກກົດລະບຽບ ແລະ ເຈລະຈາໃຫ້ໄດ້ຮັບຜົນ ຢ່າງມີຄວາມໝາຍສຳຄັນ. ຍ້ອງຍໍຊົມເຊີຍ ແລະ ຍອມຮັບໃນການປະພຶດທີ່ດີ ແລະມີຜົນສຳເລັດ. ໃຫ້ແລກປ່ຽນຄວາມເຊື່ອຂອງທ່ານເອງ, ຄວາມເປັນຫ່ວງ ແລະ ຄຸນຄ່າກ່ຽວກັບໂລກນີ້. ຊຸກຍູ້ນັກຮຽນຂອງທ່ານນັບຖືເພື່ອນຜູ້ໃຫຍ່ ເມື່ອເວລາເຂົາເຈົ້າຕ້ອງການຄຳປຶກສາ. ສືບຕໍ່ໃຫ້ ຄຳຍ້ອງຍໍ ຊົມເຊີຍ.
17 ຫາ 21 ປີ	ເປັນໄວລຸ້ນຕອນທ້າຍ. ມີຄວາມເປັນເອກະລາດຫຼາຍຂຶ້ນ ແລະ ມີຄວາມໄວ້ໃຈຕົວເອງຫຼາຍຂຶ້ນ, ຖືກອິດທິພົນ ຈາກໝູ່ເພື່ອນດຽວກັນໜ້ອຍລົງ, ພັດທະນາຄວາມສາມາດການຄິ້ນຄິດແບບຜູ້ໃຫຍ່. ໂດຍທົ່ວໄປແລ້ວສາມາດຈັດການ ກັບສິ່ງຕ່າງໆໄດ້ດີກວ່າໃນຕອນຕົ້ນ ແລະ ຕອນກາງຂອງໄວລຸ່ນ. ສ້າງ ການພົວພັນ ໃນໄລຍະຍາວກວ່າ, ອາດມີແນວຄວາມຄິດເຫັນ ກ່ຽວກັບທຸກສິ່ງທຸກຢ່າງ ມີຄວາມຮູ້ສຶກລະອາຍຕົນເອງ ກ່ຽວກັບການປະພຶດທີ່ບໍ່ດີຂອງຕົນ.	ສືບຕໍ່ປະຕິບັດຄືກັນກັບເດັກໃນໄວອາຍຸ 14 -16 ປີ ທີ່ໄດ້ເວົ້າມາຂ້າງເທິງ. ໃຫ້ຖາມນັກຮຽນຂອງທ່ານ ເປັນປະຈຳວ່າເຂົາເຈົ້າຄິດ ແລະເຊື່ອອັນໃດ. ໃຫ້ນັບຖືຄວາມເປັນເອກະຂອງເຂົາ ແລະ ຊຸກຍູ້ໃຫ້ເຂົາເຈົ້ານັບຖືຜູ້ອື່ນໆ. ຊຸກຍູ້ໃຫ້ເຮັດການຕັດສິນໃຈແບບເປັນເອກະລາດ. ສືບຕໍ່ໃຫ້ຄຳຍ້ອງຍໍ ຊົມເຊີຍ..

8. ການຊ່ວຍເຫຼືອເດັກທີ່ມີຄວາມຕ້ອງການພິເສດ

ການຕອບສະໜອງສຳລັບນັກຮຽນຜູ້ທີ່ມີມີບັນຫາທາງດ້ານອາລົມຈິດແລະພຶດຕິກຳ.

ເຕັກນິກດັ່ງຕໍ່ໄປນີ້ມີປະສິດທິຜົນໄດ້ ໂດຍສະເພາະກັບນັກຮຽນຜູ້ທີ່ມີບັນຫາດ້ານອາລົມຈິດ ແລະ ພຶດຕິກຳ.

1. ການວາງເສີຍແບບມີແຜນການ (ບໍ່ເອົາຫົວຊາ). ພຶດຕິກຳທີ່ມີຈຸດໝາຍຢາກໄດ້ຄວາມສົນໃຈ, ແຕ່ບໍ່ມີການຂະຫຍາຍກວ້າງອອກ ຫຼື ບໍ່ກະທົບກະເທືອນຕໍ່ຄວາມປອດໄພ ຫຼື ການທຳໜ້າທີ່ຢູ່ໃນຫ້ອງຮຽນ ແມ່ນການຍຸດຕິການກະທຳທີ່ໄດ້ຜົນດີທີ່ສຸດ ໂດຍຜ່ານການບໍ່ເອົາຫົວຊາແບບມີແຜນການ. ບໍ່ຄວນໃຊ້ເຕັກນິກນີ້ຈັກເທື່ອກັບການປະພຶດທີ່ຮຸນແຮງ. ຢູ່ໃນຫ້ອງຮຽນອາດຈຳເປັນສິດສອນໃຫ້ເຮັດຄືແນວນີ້ ເຊັ່ນດຽວກັນ, ເນື່ອງຈາກວ່າຄວາມສົນໃຈຂອງໝູ່ເພື່ອນຍິ່ງມີອຳນາດກວ່າຄວາມສົນໃຈຂອງຜູ້ໃຫຍ່ສຳລັບນັກຮຽນຈຳນວນໜຶ່ງ.

2.ການແຊກແຊງແບບໃຊ້ສັນຍານ. ຖ້າຫາກນັກຮຽນມີດຽງບຕໍ່ກັບການຕອບຮັບຂອງການພົວພັນອັນດີກັບຄູສອນ ແລະ ປາສະຈາກແຮງກະຕຸ້ນທາງດ້ານອາລົມຈິດ ທີ່ບໍ່ສາມາດຄວບຄຸມໄດ້, ການໃຊ້ສັນຍານໂດຍບໍ່ປາກເວົ້າອາດມີຄວາມຈຳເປັນ ເພື່ອຊ່ວຍນັກຮຽນຜູ້ນັ້ນ ໃຫ້ກັບມາມີຄວາມຈົດຈໍ່ຄືນອີກ. ໃຫ້ເບິ່ງ ພາກການໃຊ້ທ່າທາງແບບບໍ່ປາກເວົ້າທີ່ໄດ້ສະເໜີຢູ່ໃນຂ້າງເທິງ.

3. ການເຂົ້າໄປໃກ້ຊິດ ແລະ ການຄວບຄຸມແບບສຳພັດ. ຍ່າງໄປໃກ້ນັກຮຽນເອົາມືວາງໃສ່ບ່າໄຫຼ່ອາດເຮັດໃຫ້ມີປະສິດທິຜົນ ໃນການສະແດງໃຫ້ເຫັນເຖິງຄວາມຊ່ວຍເຫຼືອ ໃນວິທີການທີ່ບໍ່ເປັນການຂົ່ມຂູ່. ເມື່ອເວລານຳໃຊ້ເຕັກນິກນີ້ ຈະລະເວັ້ນຈາກການໃຊ້ພຶດຕິກຳອັນບໍ່ເໝາະສົມ. ໃຫ້ຄວາມຄິດຄວາມເຫັນແນວທາງບວກ ກ່ຽວກັບສິ່ງໃດສິ່ງໜຶ່ງທີ່ນັກຮຽນ ເຊິ່ງສະແດງໃຫ້ເຫັນວ່າມີການປະຕິບັດຕາມ ຫຼື ຟັງຄວາມ.

4.ການເພີ້ມທະວີຄວາມສົນໃຈ: ປ່ຽນແປງຈັງຫວະ ຫຼື ກິດຈະກຳການໃຫ້ຄຳເຫັນກ່ຽວກັບວຽກການຮຽນຂອງນັກຮຽນ ຫຼື ໄຕ່ຖາມກ່ຽວກັບຄວາມສົນໃຈທີ່ກ່ຽວຂ້ອງກັບວຽກການຮຽນທີ່ເອົາໃຫ້ ຖ້າຫາກວ່ານັກຮຽນສະແດງໃຫ້ເຫັນສັນຍານຂອງການບໍ່ໄດ້ພັກ.

5. ການສະແດງຄວາມຮັກແພງສ່ຳສານອັນແຮງກ້າ. ສະແດງຄວາມຮັກແຮງອັນແທ້ຈິງ, ຫຼືຄວາມຂອບໃຈ ຕໍ່ນັກຮຽນທີ່ຊ່ວຍເຫຼືອນັກຮຽນໃນການເອົາການຄວບຄຸມຕົນເອງກັບຄືນມາ.

6. ການບັນເທົາຄວາມຕຶງຄຽດໂດຍສ້າງອາລົມຂັນ: ຄືດັ່ງໄດ້ເວົ້າຢູ່ໃນຂ້າງເທິງແລ້ວອາລົມຂັນສາມາດ ຍຸດຕິການປະພຶດທີ່ບໍ່ເພິ່ງປາຖະໜາໄດ້ຖ້າຫາກວ່າໃຊ້ໃຫ້ຖືກກາລະ ແລະ ໃນທາງບວກ. ການເຢາະເຢີ້ຍແດກດັນ, ຄຳເຢາະເຢີ້ຍ ແລະ ຄວາມກ້າວລ້ຳວບໍ່ມີຄວາມເໝາະສົມທີ່ຈະໃຊ້ເປັນອາລົມຂັນ.

7. ການຊ່ວຍເຫຼືອແກ້ໄຂອຸປະສັກ. ກ່ອນນັກຮຽນຈະເລີ່ມຕົ້ນປະພຶດບໍ່ດີ ໃຫ້ຊ່ວຍເຮັດວຽກມອບໝາຍພາກຍາກໆ. ເຮັດໃຫ້ເຂົາແນ່ໃຈວ່າ ທ່ານມີຄວາມພໍໃຈເພື່ອຊ່ວຍເຫຼືອເຂົາ ແລະ ທ່ານສາມາດແກ້ໄຂບັນຫາຮ່ວມກັບເຂົາເຈົ້າ.

8. ການຈັດກຸ່ມຄືນໃໝ່. ປ່ຽນແປງການຈັດບ່ອນນັ່ງ ຫຼື ປ່ຽນແປງການມອບວຽກໃຫ້ນັກຮຽນ ເພື່ອຫຼີກເວັ້ນບັນຫາສະເພາະໃດໜຶ່ງ. ໃຫ້ເຮັດແນວນີ້ໃນວິທີທີ່ບໍ່ແມ່ນການລົງໂທດ. ຖ້າເປັນໄປໄດ້, ບໍ່ໃຫ້ນັກຮຽນສາມາດຈັບຈຸດໄດ້. ໃຫ້ເບິ່ງພາກກ່ຽວກັບ “ເຮັດໃຫ້ສະພາບແວດລ້ອມ ຂອງການຮ່ຳຮຽນມີຄວາມສະດວກສະບາຍ” ທີ່ໄດ້ເວົ້າໃນຕອນຕົ້ນຂອງເອກະສານນີ້ ເພື່ອມີແນວຄວາມຄິດເພີ່ມຕື່ມອີກ.

9.ການປັບໂຄງສ້າງໃໝ່. ຖ້າຫາກກິດຈະກຳໃດບໍ່ໄດ້ຮັບຜົນ, ໃຫ້ປ່ຽນແປງມັນໄວເທົ່າທີ່ຈະເປັນໄປໄດ້. ມີຄວາມສຳຄັນຫຼາຍຖ້າຫາກມີແຜນສຳຮອງໄວ້. ບາງຄັ້ງເປັນການດີທີ່ສຸດ ທີ່ປ່ຽນຈາກວິທີການທີ່ມີການພົວພັນຊຶ່ງກັນ ແລະ ກັນມາເປັນວິທີການທີ່ບໍ່ມີປະຕິສຳພັນຊຶ່ງກັນ ແລະ ກັນ. ສາມາດເຮັດສິ່ງນີ້ດ້ວຍຄວາມນີ້ມນວນ ແລະ ບໍ່ມີການລົງໂທດເມື່ອເວລາກຸ່ມ ນັກຮຽນມີຄວາມກະຕືລືລົ້ນເກີນຂອບເຂດ. ໃນເວລາອື່ນໆ ໃຫ້ທາງເລືອກແກ່ນັກຮຽນອາດຈະມີປະສິດທິຜົນຫຼາຍຂຶ້ນ. ນັກຮຽນສາມາດເລືອກເພື່ອສັງລວມ ເອົາຂໍ້ມູນຂ່າວສານຈາກປາກເປົ່າ ໂດຍຜ່ານການສົນທະນາ ຫຼື ກ່າຍເອົາຈາກການສາຍແຜ່ນໃສ.

10. ການດຶງດູດ/ສ້າງຄວາມສົນໃຈໂດຍກົງ. ຖ້າຫາກນັກຮຽນ ຫຼື ກຸ່ມນັກຮຽນມີການພົວພັນດີກັບຄູສອນ, ບາງຄັ້ງກໍຈະມີປະສິດທິຜົນ ທີ່ພຽງແຕ່ບອກໃຫ້ນັກຮຽນຢຸດຕິພຶດຕິກຳ ຍ້ອນວ່າມີບັນຫາເກີດຂຶ້ນ. ບໍ່ມີການໃຫ້ຜົນຕອບແທນຫຼືຂອງຂວັນໃດໆ, ອັນນີ້ເປັນພຽງການຂໍຮ້ອງຈາກຜູ້ໜຶ່ງມາຍັງຜູ້ອື່ນເທົ່ານັ້ນ.

11. ການປ້ອງກັນ. ໃຫ້ຍ້າຍນັກຮຽນຈາກສະພາບການລົບກວນກ່ອນການປະພຶດທີ່ບໍ່ເໝາະສົມຈະເກີດຂຶ້ນ, ເຊັ່ນ ບອກໃຫ້ເຂົາເຈົ້າຊ່ວຍທ່ານໃນການແຈກຢາຍເຈ້ຍ ຫຼື ບັນທຶກການມາໂຮງຮຽນຂອງນັກຮຽນ. ໃຫ້ລະມັດລະວັງຢ່າໄດ້ຍ້ອງຍໍຊົມເຊີຍນັກຮຽນ ຜູ້ທີ່ຍຸຍົງໃຫ້ເກີດບັນຫາໂດຍບໍ່ໄດ້ຕັ້ງໃຈ.

12. ການສະໜັບສະໜູນຈາກກິດຈະວັດປະຈຳວັນ, ຄືດັ່ງພວກເຮົາໄດ້ຮຽນຮູ້ແຕ່ຕອນຕົ້ນ, ຕາຕະລາງເຮັດວຽກ ແລະ ກິດຈະວັດປະຈຳວັນ ແມ່ນມີຄວາມສຳຄັນສຳລັບການຄຸ້ມຄອງການປະພຶດ ການຮູ້ຈັກສິ່ງທີ່ຈະເຮັດ ແລະ ເວລາໃດ ທີ່ຈະເຮັດແມ່ນເຮັດໃຫ້ມີການຈັດສັນການເຄື່ອນໄຫວ, ມີຄວາມປອດໄພ ແລະ ມີການຄາດຄະເນການດຳລົງຊີວິດຂອງ ນັກຮຽນຜູ້ທີ່ອາດບໍ່ມີປະສົບການເຊັ່ນໃຫ້ການຊ່ວຍເຫຼືອ ການດຳລົງຊີວິດຂອງເຂົາເຈົ້າຢູ່ໃນຂົງເຂດອື່ນໆ.

ກ. ວິທີງ່າຍໆເພື່ອຊ່ວຍເຫຼືອເດັກທີ່ມີຄວາມຕ້ອງການພິເສດ

ຂໍ້ແນະນຳພິເສດສຳລັບຄູສອນ: ເພື່ອປັບປຸງຄວາມສົນໃຈ.

- ❖ ໃຫ້ນັກຮຽນນັ່ງໃກ້ທາງໜ້າ.
- ❖ ໃຫ້ນັກຮຽນນັ່ງໃກ້ຜູ້ທີ່ເປັນແບບຢ່າງທີ່ດີ "ຜູ້ທີ່ຊ່ວຍເຫຼືອການຮຽນຂອງໝູ່ເພື່ອນ"
- ❖ ໃຫ້ແບ່ງວຽກທີ່ມອບໝາຍໃຫ້ນັ້ນເປັນຊິ້ນ ສ່ວນຫຼາຍອັນແລ້ວ ເອົາໃຫ້ນັກຮຽນເທື່ອລະອັນ (ຕົວຢ່າງ: ແທນທີ່ຈະເອົາເລກໂຈດທັງໝົດໜ້າປຶ້ມໃຫ້ນັກຮຽນ ຊຶ່ງຈະເຮັດໃຫ້ນັກຮຽນມີຄວາມທໍ້ຖອຍ, ໃຫ້ແບ່ງວຽກຢູ່ໃນໜ້າເຈ້ຍອອກເປັນສອງສ່ວນ, ເອົາເຄິ່ງໜຶ່ງໃຫ້ນັກຮຽນແກ້ກ່ອນ ເມື່ອເຮັດແລ້ວສົ່ງໃຫ້ຄູສອນ, ຈາກນັ້ນຈຶ່ງເອົາອີກເຄິ່ງໜຶ່ງໃຫ້ເຮັດຕໍ່ໄປ)
- ❖ ນຳໃຊ້ທ່າທາງເພື່ອເອົາຄວາມສົນໃຈຂອງນັກຮຽນກັບຄືນມາ(ຕົວຢ່າງ: ຍົກເຈ້ຍສີສະທ້ອນແສງຂຶ້ນ, ເຄາະໂຕະ, ຈັບບ່າ)
- ❖ ໃຊ້ຕາຈ້ອງມອງເບິ່ງນັກຮຽນກ່ອນຈະໃຫ້ຄຳແນະນຳ.
- ❖ ໃຫ້ຄຳແນະນຳສັ້ນໆ ໂດຍກົງດ້ວຍທ່າທາງແບບປະຈັກຕາ ແລະ ປາກເປົ່າທັງສອງຢ່າງຖ້າຫາກເປັນໄປໄດ້.

ເພື່ອຫຼຸດຜ່ອນຄວາມກະຕຸ້ນໃຈ.

- ❖ ເສີຍເມີຍຕໍ່ການປະພຶດເລັກໆນ້ອຍໆທີ່ບໍ່ເໝາະສົມ.
- ❖ ໃຫ້ການສະໜັບສະໜູນແນວຄິດ ຫຼືຜົນທີ່ເກີດຂຶ້ນໃນທັນທີທັນໃດ
- ❖ ກວດກາການປ່ຽນແປງລະຫວ່າງຫ້ອງຕໍ່ຫ້ອງ ຫຼືກິດຈະກຳ.
- ❖ ຮັບຮອງເອົາການປະພຶດທີ່ດີໃນເວລາທີ່ເປັນໄປໄດ້.
- ❖ ສ້າງຂໍ້ສັນຍາສຳລັບການປະພຶດທີ່ມີຄວາມຈຳເປັນເພື່ອເຮັດການຕິດຕາມ.
- ❖ ຊ່ວຍນັກຮຽນໃຫ້ຮຽນຮູ້ເຕັກນິກການຕິດຕາມຕົວເອງ

ເພື່ອຈັດການກັບຄວາມກະຕືລືລົ້ນເກີນຂອບເຂດ

- ❖ ປ່ອຍໃຫ້ນັກຮຽນຢືນໃນເວລານັ້ນ.
- ❖ ປ່ອຍໃຫ້ນັກຮຽນເຮັດທຸລະຕ່າງໆຕາມໃຈ.

ເພື່ອປັບປຸງຜົນສຳເລັດທາງດ້ານວິຊາການ

- ❖ ໃຫ້ເວລາເພີ່ມເຕີມເພື່ອເຮັດວຽກໃຫ້ແລ້ວ.
- ❖ ໃຫ້ຫຍໍ້ວຽກງານທີ່ມອບໝາຍໃຫ້ສັ້ນເຂົ້າ.
- ❖ ໃຫ້ນຳໃຊ້ວິທີການສິດສອນແບບຮັບຮູ້ຈາກຫຼາຍທາງ (ແບບປະຈັກຕາ, ປາກເປົ່າ ແລະ ຈັບບາຍ ໄດ້)
- ❖ ເຕືອນນັກຮຽນໃຫ້ກວດເບິ່ງວຽກຄືນ ເພື່ອເບິ່ງວ່າເຮັດສຳເລັດແທ້ບໍ່.
- ❖ ຊ່ວຍນັກຮຽນໃນການຮຽນເຕັກນິກການກວດກາຕົວເອງ.
- ❖ ໃຫ້ນຳໃຊ້ເຈ້ຍມອບໝາຍວຽກປະຈຳວັນ.

ເພື່ອປັບປຸງທັກສະກ່ຽວກັບວຽກງານຈັດຕັ້ງ.

- ❖ ເອົາຜູ້ປົກຄອງເຂົ້າມາຊ່ວຍ.
- ❖ ນຳໃຊ້ເຈ້ຍມອບໝາຍວຽກປະຈຳວັນ
- ❖ ນຳໃຊ້ປຶ້ມບັນທຶກສຳລັບບັນທຶກວຽກທຸກຢ່າງ
- ❖ ໃຫ້ກວດເບິ່ງປຶ້ມບັນທຶກເລື້ອຍໆ ແລະ ຊຸກຍູ້ສິ່ງເສີມໃຫ້ເຮັດການບັນທຶກທີ່ດີ.

ຂ. ການຄຸ້ມຄອງຫ້ອງຮຽນ ແລະ ດັດແກ້ການສິດສອນ

ເຕັກນິກອື່ນໆທີ່ເປັນປະໂຫຍດປະກອບມີ ດັ່ງຕໍ່ໄປນີ້:

- ❖ ຫລຸດຜ່ອນ ຫຼືໃຫ້ເລືອກວຽກທີ່ມອບໝາຍໃຫ້.
- ❖ ຕໍ່ເວລາເພື່ອໃຫ້ນັກຮຽນເຮັດວຽກສຳເລັດ
- ❖ ນຳໃຊ້ອຸປະກອນພິເສດທີ່ຊຸກຍູ້ສິ່ງເສີມຄວາມອາດສາມາດ ເຊັ່ນ ເຈ້ຍເສັ້ນກາຣາຟ, ປາກກາແຕ້ມຮູບ, ເຈ້ຍມີແຖວພິເສດ ແລະອື່ນໆ.
- ❖ ການນຳໃຊ້ອຸປະກອນປະຈັກຕາ
- ❖ ອ່ານປົດແບບປາກເປົ່າ.
- ❖ ນຳໃຊ້ປົດກວດກາແບບຫຼາຍຄຳຕອບຫຼືໝາຍຖືກ / ຜິດ ແທນການຂຽນປົດຄວາມ.
- ❖ ບອກໃຫ້ນັກຮຽນລາຍງານແບບປາກເປົ່າ(ກົງກັນຂ້າມກັບການລາຍງານດ້ວຍ ການຂຽນ)
- ❖ ຮັບເອົາໂຄງການພິເສດແທນປົດລາຍງານ.
- ❖ ເອົາມາຕຣິສການຄູນ ແລະມາຕຣິສອື່ນໆໃຫ້ນັກຮຽນ.
- ❖ ເອົາບັນຊີຄຳສັບທີ່ເຮັດຜິດທົ່ວໆໄປໃຫ້ນັກຮຽນເບິ່ງ.
- ❖ ສ້າງຂໍ້ສັນຍາກ່ຽວກັບການປະຕິບັດວຽກງານລະຫວ່າງຄູສອນ, ນັກຮຽນ ແລະ ຜູ້ປົກຄອງ.
- ❖ ໃຫ້ລາງວັນສຳລັບການມີສ່ວນຮ່ວມໃນຫ້ອງຮຽນ.
- ❖ ໃຫ້ຄຳແນະນຳເປັນບາດກ້າວ, ສັ້ນ ແລະງ່າຍດາຍ.
- ❖ ເອີ້ນຊື່ນັກຮຽນ ເພື່ອເຕືອນເຂົາເຈົ້າເພື່ອຈະຕອບຄຳຖາມຕໍ່ໄປ.
- ❖ ນຳໃຊ້ລະຫັດສີເພື່ອຊ່ວຍນັກຮຽນໃຫ້ຮູ້ຈຸດສຳຄັນຂອງຂໍ້ມູນຂ່າວສານ.
- ❖ ໃຫ້ນຳໃຊ້ສິ່ງກ່າວມາທັງໝົດຂ້າງເທິງນີ້ເລື້ອຍໆແລະໃຫ້ຊຸກຍູ້ສິ່ງເສີມແນວທາງບວກ. ຜົນປະໂຫຍດຂອງມັນຈະສືບຕໍ່ມີຕະຫລອດໄປໃນຊີວິດນີ້.